ป. บิภิติบ

ถวามรู้พื้นฐาน เสถฤะสาถ-ภาบเมือๆ

23/10/86 - ดอ/ปัมยา

ฉบับ ท = วิสุภา

Panya Chandhavisovk

ປ. ນິກິຕິນ

ຄວາມຮູ້ພື້ນຖານ ເສດຖະສາດ-ການເມືອງ

ສຳນັກພິມ "ກ້າວໜ້າ"
ມົດສະກູ

ແປໂດຍ: ແສງມາມີ ປຣະພັນ
ເຂັມແພງ ພົມເສນາ

П. Никитин

ОСНОВЫ ПОЛИТИЧЕСКОЙ ЭКОНОМИИ

на лаосском языке

© ສຳນັກພິມ "ກ້າວໜ້າ", 1985

ພິມໃນສະຫະພາບໂຊວຽດ

Н 0603010000-042 / 014(01)-85 без объявл.

ເສດຖະສາດ-ການເມືອງ ສຶກສາຄົ້ນຄ້ວາບັນຫາຫຍັງ

ມີຫລາຍວິທະຍາສາດດ້ວຍກັນ ທີ່ທຳການສຶກສາຄົ້ນຄ້ວາໂລກຂອງພວກເຮົານີ້. ໃນບັນດາວິທະຍາສາດເຫລົ່ານັ້ນ ຈຳນວນໜຶ່ງກໍສຶກສາຄົ້ນຄ້ວາ ກ່ຽວກັບທຳມະຊາດ ສ່ວນອີກຈຳນວນໜຶ່ງ ກໍສຶກສາຄົ້ນຄ້ວາດ້ານກ່ຽວກັບສັງຄົມ . ບັນດາວິທະຍາສາດທີ່ສຶກສາຄົ້ນຄ້ວາກ່ຽວກັບທຳມະຊາດນັ້ນ ເພີ້ນເອີ້ນວ່າ ວິທະຍາສາດທຳມະຊາດ. ສ່ວນບັນດາວິທະຍາສາດທີ່ສຶກສາຄົ້ນຄ້ວາກ່ຽວກັບ ການຂະຫຍາຍຕົວຂອງສັງຄົມ ດ້ານໃດດ້ານໜຶ່ງນັ້ນ ເພີ້ນເອີ້ນວ່າ ວິທະຍາສາດ-ສັງຄົມ. ເສດຖະສາດການເມືອງ ແມ່ນວິທະຍາສາດສັງຄົມ.

ທິດສະດີມາກ-ເລນິນ ປະກອບດ້ວຍ ສ ພາກສ່ວນດັ່ງນີ້: ປັດຊະຍາ, ເສດຖະສາດການເມືອງ ແລະ ທິດສະດີກ່ອນມູນິດວິທະຍາສາດ. ຄຳສັ່ງສອນຂອງມາກແລະ ເລນິນ ແມ່ນລັດທິທີ່ຄົບຖ້ວນ ແລະ ມີພື້ນຖານວິທະຍາສາດ.

ການຜະລິດວັດຖຸສິ່ງຂອງແມ່ນ ພື້ນຖານຊີວິດ ຂອງສັງຄົມ

ໃນສະໄໝກ່ອນມີຫລາຍຄົນພາກັນຄິດວ່າ ແມ່ນຫຍັງແທ້ທີ່ເປັນຕົ້ນເຫດແຫ່ງການ ຂະຫຍາຍຕົວຂອງສັງຄົມມະນຸດ.ກ່ຽວກັບບັນຫາດັ່ງກ່າວມານີ້ໄດ້ມີຫລາຍທັດສະນະແຕກຕ່າງກັນ. ເຊັ່ນຜູ້ນຳທາງສາສະໜາປ່າວປະກາດວ່າການຂະຫຍາຍຕົວຂອງທຳມະຊາດແລະສັງຄົມແມ່ນຂຶ້ນກັບ ເຈດຕະນາລົມຂອງພະຜູ້ເປັນເຈົ້າ. ອີກທັດສະນະໜຶ່ງຖືວ່າການຂະຫຍາຍຕົວຂອງ ສັງ

ຄົນໃນຂັ້ນຕັດສິນນັ້ນແມ່ນຂັ້ນກັບສິ່ງແວດລ້ອມທາງດ້ານພູມີສາດຫມາຍຄວາມວ່າ ຂັ້ນກັບເງື່ອນໄຂທໍາມະຊາດຈໍານວນໃດຫນຶ່ງ (ອາກາດ, ດິນ, ວັດຖຸດິບແລະ ອື່ນໆ). ທັດສະນະດັ່ງກ່າວໄດ້ຮັບການສະຫນັບສະຫນູນຈາກນັກວິທະຍາສາດ ນາຍທຶນຫລາຍຄົນ ຈົນເຖິງປະຈຸບັນນີ້. ແນ່ນອນ, ສິ່ງແວດລ້ອມທາງດ້ານພູມີ ສາດກໍແມ່ນເງື່ອນໄຂອັນຫນຶ່ງ ທີ່ຈໍາເປັນແກ່ການຂະຫຍາຍຕົວຂອງສັງຄົມ ແຕ ມັນຍັງບໍ່ທັນເປັນສິ່ງທີ່ຕັດສິນໄດ້ເທື່ອ. ຍົກຕົວຢ່າງຢູ່ທະວີບເອີຣົບໃນຕະຫລອດ ໄລຍະ ນ ພັນປີ ໄດ້ມີການຫັນປ່ຽນລະບອບສັງຄົມ ທີ່ແຕກຕ່າງກັນ ນ ລະບອບ ສ່ວນຢູ່ພາກກາງ ແລະ ພາກຕາເວັນອອກຂອງເອີຣົບ-ມີຣອດ ๔ ລະບອບ ສັງ ຄົມ. ໃນເວລາດຽວກັນນັ້ນ ເງື່ອນໄຂທາງພູມີສາດຢູ່ທະວີບເອີຣົບພັດບໍ່ມີການ ປ່ຽນແປງຫລາຍພໍປານໃດ ຫລືປ່ຽນແປງກໍພຽງແຕ່ເລັກນ້ອຍເທົ່ານັ້ນ. ບາງ ຄົນພັດຕີລາຄາວ່າ ເສັ້ນທາງເດີນຂອງປະຫວັດສາດ ແມ່ນຂັ້ນກັບເຈດຕະນາ ລົມສ່ວນຕົວຂອງບຸກຄົນຜູ້ສໍາຄັນເທົ່ານັ້ນ ເຊັ່ນບັນດາຜູ້ນໍາລັດ, ນາຍພົນ ນາຍ ພັນ ແລະ ອື່ນໆ. ໃນຕົວຈິງແລ້ວ ການເຄື່ອນໄຫວຂອງບັນດາບຸກຄົນ ສໍາຄັນ ເຫລົ່ານີ້ ສາມາດພຽງແຕ່ຊຸກຍູ້ຫລືຖ່ວງດຶງເຫດການໃດຫນຶ່ງ ທີ່ບັງເກີດ ຂັ້ນ ເທົ່ານັ້ນ ແຕ່ວ່າບໍ່ສາມາດ ຫັນປ່ຽນເສັ້ນທາງເດີນຂອງປະຫວັດສາດໄດ້ເລີຍ.

ແມ່ນອັນໃດແດ່ທີ່ກໍານົດການຂະຫຍາຍຕົວຂອງສັງຄົມ ?

ທ່ານການ| ມາກ ເປັນຜູ້ທໍາອິດທີ່ໃຫ້ຄໍາຕອບທີ່ມີລັກສະນະວິທະຍາສາດ ຕໍ່ບັນຫາດັ່ງກ່າວນີ້.

ເພື່ອດໍາລົງຊີວິດຢູ່ໄດ້ ຄົນເຮົາ ຈໍາຕ້ອງມີອາຫານ, ເຄື່ອງນຸ່ງຫົ່ມ, ເກີບ, ທີ່ຢູ່ອາໃສ ແລະ ວັດຖຸສິ່ງຂອງອື່ນໆອີກ. ແຕ່ເພື່ອຈະໃຫ້ໄດ້ມາຊຶ່ງສິ່ງ ຂອງເຫລົ່ານີ້ ຄົນເຮົາຈໍາຕ້ອງທໍາການຜະລິດ ແລະ ອອກແຮງງານ. ສັງຄົມ ໃດກໍຕາມຈະຕ້ອງລົ້ມລະລາຍລົງ ຖ້າວ່າສັງຄົມນັ້ນຫາກຢຸດຕິການຜະລິດ ວັດຖຸ ສິ່ງຂອງຕ່າງໆ. ຍອມແມ່ນັ້ນເອງ ການຜະລິດວັດຖຸສິ່ງຂອງ ຈຶ່ງແມ່ນ ພື້ນ ຖານແຫ່ງຊີວິດ ແລະ ການຂະຫຍາຍຕົວຂອງທຸກໆສັງຄົມ.

ການຜະລິດວັດຖຸສິ່ງຂອງຄືແນວໃດ ? ການຜະລິດວັດຖຸສິ່ງຂອງ ປະ ກອບດ້ວຍແຮງງານຄົນ, ພາຫະນະ ແຮງງານ ແລະ ເປົ້າຫມາຍແຮງງານ.

<u>ແຮງງານ</u> ແມ່ນການເຄື່ອນໄຫວທີ່ເຕັມໄປດ້ວຍຈຸນປະໂຫຍດຂອງ ມະ ນຸດເພື່ອຜະລິດວັດຖຸສິ່ງຂອງຕ່າງໆ. ໃນການອອກແຮງງານນັ້ນ ມະນຸດກະທົບ

ใส่ทำมะอาถเพื่อนำเอิ้าทำมะอาถนั้น มารับใช้ความธรรภร้อวต้อวภานออวติน. แธววาน แม่นความมั่วคั่วสิมบูนที่สำคันที่สุด ขอวมะนุถ, ความจำเป็นทาวทำมะอาถ ตะหลอถภาน และ เวื่อนไขอันถับ หนึ่ว สำลับจุิวิถมะนุถ. ท่านอัวแภน ได้เว้ำว่า แม่นแธววานนั้นเอวที่สาวมะนุถขึ้นมา.

ภานผะลิถโดยบ่มีพาหะนะแธววาน แม่นเป็นไปบ่ได้ย่าว เถัถขาถ. พาหะนะแธววาน แม่นปะเพถวัถถุสิ่วขอวต่าวๆ จุ่วมะนุถ ได้นำไปภะทิบใส่เป้าหมายแธววานแล้วภำถัถแปวธูบจุิวมันขึ้น. พาหะนะแธววานปะภอบถ้วยยานพาหะนะต่าวๆ และ อุปะภอนเคื่อวมื, ตึภโธว และ สะถานที่ต่าวๆ ที่เป็นบ่อนผะลิถ, พาหะนะขินสิ่ว ทุภปะเพถ, เหมือวฝาย, สายไฟฟ้า และ อื่นๆอีภ. นอภจาภนี้ภำยัวมีถิ่นที่เป็นพาหะนะแธววานนำอีภ. ยู่ในจำพวภพาหะนะแธววานทัวหมิถ นี้บิถบาถที่มีลัภสะนะตัถสิมแม่นขึ้นภับเคื่อวมืแธววาน. ละถับภานภะทิบขอวมะนุถใส่ทำมะอาถนั้น แม่นขึ้นภับปะเพถอุปะภอนแธววาน ที่พวภเอิ้าเจ้ำนำใช้. เจุ้นคาวสะไหมสัวคิมปะถิมบูธาน มะนุถ ได้นำใช้ภ้อนหิน และ ไม้ค้อนเป็นเคื่อวมืแธววาน และ ย้อนแนวนั้น จึ่วขาถสะมัถถุะพาบที่จะต่ำสู้ภับทำมะอาถ. มะนุถสะไหมใหม่ แม่นเธัถ วรภถ้วยเคื่อวภิมจัภอันมีปะสิถทิพาบสูว และ ละถับภานภะทิบใส่ทำมะ - อาถ ภำนับมี้มีผิมสูวขึ้นย่าวปรบทรบภันบ่ได้. สะหลุบแล้ว จึ่ว สามาถเว้ำได้ว่า ละถับวิวัถขอวเคื่อวมืแธววานใถหนึ่วภำตาม แม่นถึ เอิ้าภานเป็นเจ้ำภานขอวมะนุถต่ำทำมะอาถ ที่แวถล้อมติน. ภานมาภ ได้จุ้แจวให้ธู้ว่า ยุภสะไหมเสถถุะภิถนี้มีความแตภต่าวภันบ่แม่นยู่บ่อน ที่ว่า ผะลิถหยัวแต่หาภแม่นผะลิถแนวใถ และ ถ้วยพาหะนะ ออภแธววานอันใถ [๑].

โดยนำใช้เคื่อวมืแธววานนั้นเอว มะนุถจึ่วได้ออภแธว ภะทิบใส่เป้าหมายแธววาน, หมายความว่าใส่ต่ำทุภย่าวที่แธววานมะนุถมุ่ว

---

๑) ภ.มาภ และ ฝ.อัวแภน. บิถนิพิน, เหลั้ม ๔ฆ, หน้า ๑๓๑.

ຫມາຍແນໃສ່. ມະນຸດຈະພົບພໍ້ເປົ້າຫມາຍແຮງງານຕ່າງໆໄດ້ ຢູ່ໃນວັດຖແວດ ລ້ອມຕົນກໍຄືຢູ່ໃນກະໂຕທຳມະຊາດນັ້ນເອງ. ທຸກໆເປົ້າຫມາຍການຜະລິດ ທີ່ສຳຄັນກວ່າຫມູ່ຄື-ຊັບພະຍາກອນໃຕ້ພື້ນດິນ, ພຶກສາຊາດ ແລະ ສັດສາວາສິ່ງຕ່າງໆ, ຊັບພະຍາກອນໃຕ້ພື້ນນຳ້-ທັງຫມົດນີ້ມີຢູ່ໃນທຳມະຊາດທັງນັ້ນ. ເປົ້າຫມາຍແຮງງານທີ່ຖືກຫັນປ່ຽນດ້ວຍແຮງງານມະນຸດ ແຕ່ຕ້ອງໄດ້ຮັບການ ດັດແປງເປັນຄຸນລັກສະນະໃຫມ່ນັ້ນ ເພີ່ນເອີ້ນວ່າ <u>ພັດສະດຸວັດຖຸດິບ</u> <u>ຫລືວັດຖຸດິບ.</u> ໃນປະຈຸບັນນີ້ ເພີ່ນນຳໃຊ້ເປົ້າຫມາຍແຮງງານແບບໃຫມ່ຫລາຍຢ່າງ ທີ່ບໍ່ມີ ຢູ່ໃນທຳມະຊາດ. ມະນຸດໄດ້ສ້າງວັດຖຸເຫລົ່ານີ້ຂຶ້ນມາ ໂດຍປະກອບດ້ວຍຄຸນລັກສະນະພິເສດຕ່າງໆເຊັ່ນ-ທາດໂປລີແມຣ່, ຢາງທຽມ ແລະ ອື່ນໆ. ໂດຍຫມູນໃຊ້ພາຫະນະແຮງງານ ໃນການເຄື່ອນໄຫວອອກແຮງງານນັ້ນ ມະນຸດ ໄດ້ເຮັດໃຫ້ເປົ້າຫມາຍແຮງງານມາຕອບສະຫນອງຄວາມຮຽກຮ້ອງຕ້ອງການຂອງຕົນ. ຫມາກຜົນທີ່ໄດ້ຮັບໃນການເຄື່ອນໄຫວດັ່ງກ່າວນັ້ນ ແມ່ນ<u>ຜົນຜະລິດ</u> <u>ແຮງ</u>ງານ.

ພາຫະນະແຮງງານ ແລະ ເປົ້າຫມາຍແຮງງານລວມເຂົ້າກັນແລ້ວປະກອບເປັນ<u>ພາຫະນະແຫ່ງການຜະລິດ</u>. ແມ່ນອນວ່າ ພາຫະນະແຫ່ງການຜະລິດ ຈະບໍ່ສາມາດທຳການຜະລິດວັດຖສິ່ງຂອງໄດ້ດ້ວຍມັນເອງ. ເຄື່ອງຈັກຈະມີຄຸນນະພາບດີເດັ່ນພຽງໃດກໍຕາມ ແຕ່ມັນຈະເປັນພຽງເສດເຫລັກເທົ່ານັ້ນ ຖ້າປາສະຈາກການນຳໃຊ້ແຮງງານມະນຸດ. ດ້ວຍເຫດນັ້ນ ປັດໄຈທີ່ມີ ຄວາມຫມາຍຕັດສິນຂອງທຸກໆການຜະລິດ ແມ່ນມະນຸດຫລື ກຳລັງແຮງງານຂອງມະນຸດ ນັ້ນເອງ.

ກຳລັງການຜະລິດແລະການ ພົວພັນ ແຫ່ງການ ຜະລິດ

ການຜະລິດຈະຢູ່ໃນລະດັບຂະຫຍາຍຕົວ ຂັ້ນ ໃດໆກໍຕາມ ແມ່ນປະກອບມີ ๘ ດ້ານດ້ວຍກັນ ສະເຫມີຄື: ກຳລັງການຜະລິດ ແລະການພົວ ພັນແຫ່ງການຜະລິດ.

<u>ກຳລັງການຜະລິດ</u>- ແມ່ນພາຫະນະການຜະລິດຕ່າງໆທີ່ສັງຄົມ ສ້າງຂຶ້ນ, ກ່ອນອື່ນຫມົດ ແມ່ນເຄື່ອງມືແຮງງານ ແລະ ລວມທັງຄົນທີ່ຜະລິດ ວັດຖສິ່ງຂອງຕ່າງໆອີກ. ດ້ວຍມັນສະຫມອງປະດິດສ້າງ, ປະສົບການ ແລະຄວາມ

ຊຳນິຊຳນານ ຄົນເຮົາຈຶ່ງໄດ້ຜະລິດ ແລະ ນຳເອົາພາຫະນະແຮງງານ ກໍ ຄືເຄື່ອງມືແຮງງານເຂົ້າສູ່ການຜະລິດ, ດັດແປງເຄື່ອງມືດັ່ງກ່າວ ໃຫ້ມີຄຸນນະ ພາບດີຂຶ້ນ, ປະດິດສ້າງເຄື່ອງຈັກແບບໃຫມ່, ນຳເອົາເປົ້າຫມາຍ ແຮງງານ ອັນໃຫມ່ເຂົ້າສູ່ການຜະລິດ, ຂະຫຍາຍກວ້າງ ຄວາມຮູ້ຄວາມສາມາດ ຂອງ ຕົນ. ສິ່ງທັງຫມົດເຫລົ່ານີ້ ຮັບປະກັນການຂະຫຍາຍຕົວຂອງກຳລັງການຜະລິດ ແລະ ດຳເນີນການຜະລິດວັດຖຸສິ່ງຂອງໃນລະດັບສູງກວ່າເກົ່າ.

ແຕ່ວ່າຄົນເຮົາທຳການຜະລິດວັດຖຸສິ່ງຂອງ ບໍ່ແມ່ນໂດຍ ຢູ່ເອກະເທດ ແຕ່ໂດຍມີການພົວພັນຊຶ່ງກັນ ແລະ ກັນໂດຍເຕົ້າໂຮມກັນເປັນກຸ່ມເປັນຫນ່ວຍ, ເປັນສະມາຄົມ ແລະ ອື່ນໆ...ພວກເຮົາຂໍຍົກເອົາຕົວຢ່າງໂຮງງານ ຜະລິດ ເກີບສະໄຫມປະຈຸບັນ. ຢູ່ໃນໂຮງງານນັ້ນ ມີຄົນຈຳນວນເທົ່າໃດ ທີ່ອອກແຮງ ງານຜະລິດສິນຄ້າປະເພດດຽວ-ຄືເກີບ ? ນັບເປັນຈຳນວນຮ້ອຍໆແລະ ພັນໆ ຄົນ, ນອກຈາກນັ້ນຍັງມີຄົນຈຳນວນຫລວງຫລາຍກວ່ານີ້ອີກ ທີ່ຜະລິດ ເຄື່ອງ ຈັກ, ແຜ່ນຫນັງ, ກໍ້ດ້າຍ, ເຂັມຫຍິບ ແລະ ອື່ນໆສຳລັບໂຮງງານດັ່ງກ່າວ. ນອກນີ້ຂໍຍົກເອົາຕົວຢ່າງອີກເຊັ່ນ ຊາວໄຮ່ນາທຳມະດາສາມັນທີ່ຜະລິດເຂົ້າ ກໍ ຍັງບໍ່ສາມາດຈະຕັດຂາດຈາກໂລກພາຍນອກໄດ້: ເຂົາຕ້ອງການມີເຄື່ອງມືກະ ສິກຳ, ເກືອ, ໄມ້ຂີດໄຟ, ສະບູ ແລະ ສິ່ງຂອງອື່ນໆ ຊຶ່ງເປັນຜະລິດຕະພັນ ຂອງຄົນອື່ນ. ສິ່ງທີ່ກ່າວມານີ້ ຫມາຍເຖິງວ່າ ຢູ່ໃນການຜະລິດວັດຖຸສິ່ງຂອງ ຕ່າງໆນັ້ນ ຄົນເຮົາຍາມໃດກໍພົວພັນ ແລະ ອາໃສຊຶ່ງກັນ ແລະ ກັນ ແລະ ກໍ ກ້າວເຂົ້າສູ່ການພົວພັນໃດຫນຶ່ງລະຫວ່າງກັນ.

ການພົວພັນລະຫວ່າງມະນຸດດ້ວຍກັນຢູ່ໃນຊົ່ວໄລຍະການຜະລິດນັ້ນອາດ ຈະມີລັກສະນະເຕັກນິກ ແລະ ເສດຖະກິດພ້ອມ. ການພົວພັນ ດ້ານເຕັກນິກ ແມ່ນມາຈາກເງື່ອນໄຂເຕັກໂນໂລຢີ ຫລືເຕັກນິກການຜະລິດ ແລະ ຈາກການ ຈັດຕັ້ງແຮງງານນຳອີກ, ຍົກຕົວຢ່າງຢູ່ໂຮງງານໃຫຍ່ແຫ່ງຫນຶ່ງກໍຕ້ອງ ມີການ ຈັດວາງຄົນງານຢ່າງຄັກແນ່ຕາມສະຖານທີ່ເຮັດວຽກ ແລະ ຂະແຫນງການຜະ ລິດໂດຍອີງຕາມວົງຈອນເຕັກໂນໂລຢີ. ວຽກງານການຜະລິດນັ້ນກໍຕ້ອງ ແມ່ນ ບຸກຄົນທີ່ເປັນນັກວິສະວະກອນດ້ານເຕັກນິກ, ບັນດານາຍຊ່າງ, ຫົວຫນ້າ ຈຸ ຫນ່ວຍເປັນຜູ້ຄວບຄຸມ. ຢູ່ໃນຊົ່ວໄລຍະການຜະລິດນັ້ນ ຄົນເຫລົ່ານີ້ຈະຕ້ອງອາ ໄສຊຶ່ງກັນ ແລະ ກັນໂດຍຂຶ້ນກັບລະບຽບການຜະລິດ. ລະຫວ່າງຄົນພວກນີ້ ກໍ

ໄດ້ມີການພົວພັນກັນທາງດ້ານເຕັກນິກ. ແຕ່ວ່າເສດຖະສາດການເມືອງ ບໍ່ໄດ້ຄົ້ນຄວ້າເບິ່ງການພົວພັນທາງດ້ານເຕັກນິກແຕ່ຢ່າງໃດ. ເນື້ອໃນຂອງ ວິຊາເສດຖະສາດການເມືອງ ແມ່ນ<u>ການພົວພັນເສດຖະກິດ</u>ຫລືວ່າ <u>ການພົວພັນແຫ່ງການຜະລິດ.</u>

ທ່ານ ມາກ ໄດ້ເວົ້າ ການພົວພັນສັງຄົມລະຫວ່າງມະນຸດດ້ວຍກັນຢູ່ໃນໄລຍະການຜະລິດ, ການແລກປ່ຽນ, ແບ່ງປັນ ແລະ ບໍລິໂພກສິ່ງຂອງນັ້ນວ່າ ເປັນການພົວພັນແຫ່ງການຜະລິດ ຫລືການພົວພັນເສດຖະກິດ. ການພົວພັນເສດຖະກິດແມ່ນການພົວພັນທີ່ກ່ຽວພັນກັບລຸນລັກສະນະ, ທາດແທ້ ໃນການເປັນເຈົ້າຂອງຕໍ່ພາຫະນະ ການຜະລິດ ແລະ ພົນຜະລິດ. ການພົວພັນ ແຫ່ງການຜະລິດ ອາດຈະເປັນທັງການພົວພັນຮ່ວມມື ແລະ ຊ່ວຍເຫລືອຊຶ່ງກັນແລະກັນລະຫວ່າງບັນດາເຫລົ່າຄົນ ທີ່ຖືກປົດປ່ອຍຈາກການກົດຂີ່ຂູດຮີດ ຫລືອາດຈະເປັນທັງການພົວພັນດ້ວຍການຂູດຮີດຄົນນຳອີກກໍເປັນໄດ້. ທັງໝົດນີ້ ມັນລ້ວນກ່ຽວຂ້ອງກັບບ່ອນວ່າ ພາຫະນະການຜະລິດອັນຕົ້ນຕໍເຊັ່ນ: ດິນ ແລະ ຊັບພະຍາກອນຂອງດິນ, ປ່າໄມ້, ໂຮງຈັກໂຮງງານ, ເຄື່ອງມືແຮງງານ ແລະ ອື່ນໆ ນັ້ນແມ່ນໃຜເປັນເຈົ້າຂອງມັນ. ໃນເມື່ອວ່າພາຫະນະການຜະລິດຫາກເປັນຊັບສົມບັດສ່ວນຕົວ,ໝາຍຄວາມວ່າ ບໍ່ເປັນຊັບສົມບັດຂອງສັງຄົມລວມທັງໝົດ ແຕ່ຫາກແມ່ນຂອງສ່ວນບຸກຄົນ, ກຸ່ມຄົນໃດໜຶ່ງ, ບໍລິສັດໃດໜຶ່ງແລ້ວໃນເມື່ອນັ້ນ ໄດ້ມີການພົວພັນດ້ວຍການຂູດຮີດຄົນຕໍ່ຄົນ, ການພົວພັນແບບຄອບຄອງແລະບີບຮັດປະກົດຕົວຂຶ້ນ. ຍ້ອນວ່າຢູ່ໃນລະບອບທຶນນິຍົມ ບັນດານຳມະກອນ ຊາດພາຫະນະການຜະລິດ, ພວກເຂົາຈຶ່ງຈຳຕ້ອງເຮັດວຽກໃຫ້ພວກນາຍທຶນ. ສ່ວນຢູ່ໃນລະບອບສັງຄົມນິຍົມແລ້ວ ພາຫະນະການຜະລິດເປັນຂອງສ່ວນລວມ. ຍ້ອນແນວນັ້ນ ຈຶ່ງບໍ່ມີການຂູດຮີດກັນ ແລະ ການພົວພັນລະຫວ່າງຄົນຕໍ່ຄົນຈຶ່ງ ເປັນການພົວພັນຮ່ວມມືແບບມິດສະຫາຍ ແລະ ຊ່ວຍເຫລືອກັນແບບສັງຄົມນິຍົມ.

ການພົວພັນຂອງຄົນເຮົາຕໍ່ພາຫະນະການຜະລິດ ໄດ້ກຳນົດລັກແນ່ເຖິງສະພາບແລະທີ່ຕັ້ງຂອງຄົນຢູ່ໃນການຜະລິດ ແລະ ວິທີການແບ່ງປັນຜົນ ຜະລິດແຮງງານ. ເຊັ່ນຢູ່ໃນລະບອບທຶນນິຍົມ ພວກນາຍທຶນຈຶ່ງເປັນເຈົ້າຂອງພາຫະນະການຜະລິດ ໄດຄອບຄຸມທຸກຜົນຜະລິດທີ່ເຮັດດ້ວຍນ້ຳມືຂອງບັນດາ ກຳມະກອນ, ສ່ວນບັນດາກຳມະກອນເອງພັດໄດ້ຮັບວັດຖຸບໍລິໂພກພຽງແຕ່ໃນຈຳນວນທີ່

ຈຳເປັນ ເພື່ອຕົນຈະມີເຫື່ອແຮງສົບຕໍ່ການຜະລິດຂັ້ນຕໍ່ໄປ. ຢູ່ໃນລະບອບ ສັງຄົມນິຍົມຊຶ່ງເປັນບ່ອນທີ່ພາຫະນະການຜະລິດເປັນຂອງປະຊາຊົນ (ຊຸບສົມບັດສ່ວນລວມ) ການແບ່ງປັນວັດຖຸນຳໃຊ້ຈຶ່ງປະຕິບັດຕາມແຮງງານ, ໄດ້ມີການຮັບປະກັນການເພີ່ມທະວີລະດັບຊີວິດການເປັນຢູ່ດ້ານວັດຖຸ ກໍ ດ້ານວັດທະນະທຳຂອງຊາວຜູ້ອອກແຮງງານທັງໝົດຢ່າງສະໝ່ຳສະເໝີ.

ປະຫວັດສາດແຫ່ງການຂະຫຍາຍຕົວຂອງສັງຄົມມະນຸດ ປະກອບ ດ້ວຍການພົວພັນແຫ່ງການຜະລິດຫ້າຊະນິດ: ລະບອບປະຖົມບູຮານ, ຂ້າທາດ, ສັກດິນາ, ນາຍທຶນ ແລະ ສັງຄົມນິຍົມ ຊຶ່ງເປັນຂັ້ນທຳອິດຂອງລະບອບ ກອມມູນິດ. ນອນຢູ່ໃນພື້ນຖານຕົ້ນຕໍຂອງແຕ່ລະຊະນິດທີ່ກ່າວມານີ້ ໄດ້ມີຮູບການຂອງໃຜັນໃນການເປັນເຈົ້າຕໍ່ພາຫະນະການຜະລິດ. ເຊັ່ນຕົວຢ່າງພື້ນຖານ ການພົວພັນແຫ່ງການຜະລິດໃນລະບອບຂ້າທາດ, ສັກດິນາ ແລະ ນາຍທຶນ ຖືເອົາພາຫະນະການຜະລິດເປັນກຳມະສິດສ່ວນຕົວ. ກຳມະສິດສ່ວນຕົວນີ້ເລີຍ ນຳ ແລະ ກໍຈະນຳໄປເຖິງການແບ່ງແຍກສັງຄົມເປັນຊົນຊັ້ນທີ່ປໍລະປັກກັນຄືພວກ ທີ່ຂູດຮີດ ແລະ ພວກທີ່ຖືກຂູດຮີດ. ມີພຽງແຕ່ຢູ່ໃນລະບອບສັງຄົມນິຍົມເທົ່ານັ້ນທີ່ພື້ນຖານການພົວພັນແຫ່ງການຜະລິດຖືເອົາພາຫະນະການຜະລິດເປັນຂອງສ່ວນລວມສັງຄົມນິຍົມ, ບໍ່ມີການຕໍ່ສູ້ຊົນຊັ້ນ, ສັງຄົມກໍປະກອບດ້ວຍຊົນຊັ້ນເພື່ອນມິດກັນຄື-ກຳມະກອນ, ຊາວໄຮນາ ແລະ ປັນຍາຊົນ.

ກຳລັງການຜະລິດ ແລະ ການພົວພັນແຫ່ງການຜະລິດລວມເຂົ້າ ກັນ ແລ້ວເອີ້ນວ່າ <u>ແບບວິທີການຜະລິດ.</u>



ເຖິງແມ່ນວ່າກຳລັງການຜະລິດ ແລະ ການພົວພັນແຫ່ງການ ຜະລິດ ແມ່ນດ້ານທີ່ແຕກຕ່າງກັນ ໃນແບບວິທີການຜະລິດກໍຕາມ ແຕ່ມັນຫາກ ຕັດແຍກອອກຈາກກັນບໍ່ໄດ້ ຍາມໃດກໍພົວພັນເຄື່ອນໄຫວ ແລະ ກະທົບໃສ່ກັນຢູ່ສະເຫມີ ໃນຊ່ວງໄລຍະແຫ່ງວິວັດທະນາການຂອງປະຫວັດສາດສັງຄົມນີ້ ມັນມີການຂະຫຍາຍຕົວທັງກຳລັງການຜະລິດກໍຄືທັງການພົວພັນແຫ່ງການຜະລິດໄປພ້ອມໆກັນ

ກຳລັງການຜະລິດ-ແມ່ນອົງປະກອບອັນຫນຶ່ງ ທີ່ເຄື່ອນໄຫວເຫນັງຕີງ ຫລາຍກວ່າຫມູ່ຂອງແບບວິທີການຜະລິດ ຍ້ອນວ່າຄົນເຮົາຍາມໃດກໍໄດ້ຮັບ ຜົນສຳເລັດໃນການຜະລິດເຄື່ອງມືແຮງງານໃຫມ່ຂຶ້ນມາຢູ່ເລື້ອຍໆ ແລະ ກໍໄດ້ສະສົມປະສົບການໃນການຜະລິດນຳອີກ. ການພົວພັນແຫ່ງການຜະລິດ ມີການຜັນແຢໄປໆມາໆໂດຍຂຶ້ນກັບລະດັບການຂະຫຍາຍຕົວຂອງກຳລັງການຜະລິດ ແລະ ກະທົບໃສ່ການຂະຫຍາຍຕົວຂອງກຳລັງການຜະລິດແຕ່ກໍບໍ່ສອດຄ່ອງກັບ ກຳລັງການຜະລິດສະເຫມີໄປ. ໃນເມື່ອວ່າການພົວພັນ ແຫ່ງການຜະລິດ ຫາກສອດຄ່ອງສົມດູນກັບລະດັບການຂະຫຍາຍຕົວຂອງກຳລັງການຜະລິດແລ້ວ ເມື່ອນັ້ນ ການພົວພັນແຫ່ງການຜະລິດ ກໍຈະຊຸກຍູ້ສ້າງເງື່ອນໄຂ ແກ່ການຂະຫຍາຍຕົວ ຂອງກຳລັງການຜະລິດ. ໃນເມື່ອການພົວພັນແຫ່ງການຜະລິດຫາກບໍ່ສອດຄ່ອງ ສົມດູນກັບລະດັບການຂະຫຍາຍຕົວ ຂອງກຳລັງການຜະລິດແລ້ວ ເມື່ອນັ້ນ ມັນ ກໍຈະຈ່ອງດຶງການເຕີບໃຫຍ່ຂະຫຍາຍຕົວຂອງກຳລັງການຜະລິດ.ຕົວຢ່າງຂອງ ຄວາມບໍ່ສອດຄ່ອງສົມດູນລະຫວ່າງການພົວພັນແຫ່ງການຜະລິດ ແລະ ລະດັບ-ການຂະຫຍາຍຕົວຂອງກຳລັງການຜະລິດນັ້ນຄືຈຳພວກບັນດາປະເທດ ທຶນນິຍົມ ສະໄຫມປະຈຸບັນນີ້. ຢູ່ໃນບັນດາປະເທດເຫລົ່ານີ້ ການຂະຫຍາຍຕົວຂອງການ ຜະລິດບໍ່ຄົງທີ່ ແລະໃນເວລາມີວິກິດການທາງດ້ານເສດຖະກິດນັ້ນຈັງຫວະການ ຂະຫຍາຍການຜະລິດແມ່ນຫລຸດຕຳລົງຢ່າງຮ້າຍແຮງ, ຊາວຜູ້ອອກແຮງງານ ນັບເປັນລ້ານໆຄົນຂາດວຽກເຮັດງານທຳ ແລະ ດັ່ງນີ້ຈຶ່ງເພີ່ມທະວີຈຳນວນຄົນ ຫວ່າງງານຂຶ້ນ. ສິ່ງດັ່ງກ່າວນີ້ມັນເກີດມີຂຶ້ນຍ້ອນວ່າຢູ່ໃນສັງຄົມນາຍທຶນກຳມະ ສິດສ່ວນຕົວ ແລະ ກຳມະສິດທຶນນິຍົມແຫ່ງລັດ ກ່ຽວກັບພາຫະນະການ ຜະລິດ ເປັນຜູ້ຄອບງຳແລະທັງເປັນອຸປະສັກກີດກັ້ນການຂະຫຍາຍຕົວຂອງກຳລັງ ການ ຜະລິດ.

ຫາກມີການປ່ຽນແປງລະດັບການຂະຫຍາຍຕົວຂອງກຳລັງການ ຜະລິດ

ແລ້ວ ການພົວພັນແຫ່ງການຜະລິດກໍຈະ ດັດປ່ຽນແປງໄປພ້ອມໆກັນ. ນັ້ນຄືກົດ ເກນເສດຖະກິດ ກ່ຽວກັບການສອດຄ່ອງການພົວພັນແຫ່ງການຜະລິດກັບລັກສະ ນະ ແລະ ລະດັບການຂະຫຍາຍຕົວຂອງກຳລັງການຜະລິດ ຊຶ່ງ ກ. ມາກ ເປັນຜູ້ຄົ້ນພົບກົດເກນນີ້ໄດ້ຊີ້ໃຫ້ເຫັນເຖິງ ພື້ນຖານເສດຖະກິດ ແຫ່ງການປະຕິ ວັດສັງຄົມ. ໃນເມື່ອການພົວພັນແຫ່ງການຜະລິດຫາກຖ່ວງດຶງລະດັບ ການຂະ ຫຍາຍຕົວຂອງກຳລັງການຜະລິດ ແລະ ສ້າງຄວາມສັບສົນແກ່ການ ຂະຫຍາຍ ຕົວຂອງກຳລັງການຜະລິດແລ້ວ ການພົວພັນແຫ່ງການຜະລິດແບບໃໝ່ຈະຕ້ອງ ເຂົ້າມາສັບປ່ຽນແທນທີ່ໂລດຢ່າງຫລີກເວັ້ນບໍ່ໄດ້. ຢູ່ໃນສັງຄົມທີ່ແບ່ງແຍກເປັນ ຊົນຊັ້ນປໍລະປັກກັນນັ້ນ ການສັບປ່ຽນການພົວພັນແຫ່ງການຜະລິດຈະດຳເນີນໄປ ດ້ວຍການປະຕິວັດສັງຄົມໂດຍສະເໝີໄປ. ເປັນຫຍັງການປະຕິວັດຈຶ່ງເປັນສິ່ງ ທີ່ຫລີກເວັ້ນບໍ່ໄດ້ ?

ຍ້ອນວ່າຊົນຊັ້ນໃນສັງຄົມ ຊຶ່ງການພົວພັນແຫ່ງການຜະລິດແບບເກົ່າຮັບ ໃຊ້ຜົນປະໂຫຍດຂອງເຂົາເຈົ້ານັ້ນບໍ່ຍອມເສຍສະຫລະ ທີ່ຕັ້ງຂອງຕົນຢ່າງ ສະ ໝັກໃຈ. ຈະເປັນໄປໄດ້ບໍ່ວ່າພວກນາຍທຶນອາເມລິກາຈະຍອມເສຍ ສະຫລະ ໂຮງຈັກໂຮງງານ, ເສັ້ນທາງລົດໄຟ ແລະ ອື່ນໆຂອງພວກເຂົາເຈົ້າ. ແມ່ ນວ່າ ພວກເຂົາເຈົ້າຈະບໍ່ຍອມເສຍສະຫລະໄດ້ຢ່າງເດັດຂາດ ເພາະ ວ່າ ກຳມະສິດສ່ວນຕົວອຳນວຍຄວາມສະດວກໃຫ້ເຂົາເຈົ້າໄດ້ຮູດຮີດຊາວ ຜູ້ອອກ ແຮງງານ, ເພີ່ມທະວີກອບທຶນຂອງຕົນ ແລະ ຢູ່ກິນຢ່າງອຸດົມສົມບູນ. ຍອມ ແນວນັ້ນ ເພື່ອຈະສັບປ່ຽນການພົວພັນແຫ່ງການຜະລິດແບບເກົ່າແກ ຫລ້າຫລັງ ທີ່ເປັນສິ່ງຖ່ວງດຶງການຂະຫຍາຍຕົວຂອງກຳລັງການຜະລິດນັ້ນ ຈະຕ້ອງມີ ກຳ ລັງແຮງຂອງສັງຄົມ ຈຶ່ງຈະຊ່ວຍໃຫ້ລົບລ້າງການພົວພັນກັນແບບຮູດຮີດຄົນຕໍ່ຄົນ ໄດ. ກຳລັງແຮງຂອງສັງຄົມດັ່ງກ່າວຢູ່ໃນສັງຄົມທຶນນິຍົມແມ່ນຊົນຊັ້ນ ກຳມະ ກອນ. ໂດຍຮ່ວມສຳພັນກັບຊາວໄຮ່ນາຜູ້ອອກແຮງງານ ແລະ ກຸ່ມຊົນທີ່ຖືກກົດ ຂູດຮີດອື່ນໆ ຊົນຊັ້ນກຳມະກອນມຸ່ງໝາຍຢາກທັບມ້າງການກົດຂູດຮີດນັ້ນ ທີ່ ສຸດ.

ມີແຕ່ຢູ່ໃນລະບອບສັງຄົມນິຍົມຊຶ່ງເປັນບ່ອນທີ່ປາສະຈາກຊົນຊັ້ນ ຮູດຮີດ ເທົ່ານັ້ນ ການຂະຫຍາຍຕົວການພົວພັນແຫ່ງການຜະລິດ ຈຶ່ງບໍ່ໄດ້ດຳເນີນ ໄປ ດ້ວຍຮູບການການປະຕິວັດສັງຄົມແຕ່ຢ່າງໃດ ແຕ່ຫາກດຳເນີນໄປດ້ວຍຮູບການ

ການປ່ຽນແປງການພົວພັນແຫ່ງການຜະລິດ ແບບມີແຜນການ ໃນຂະນະທີ່ ກຳ ລັງການຜະລິດຂະຫຍາຍຕົວ.

ນອກນີ້ ຍັງມີໂຄງລ່າງສັງຄົມອີກທີ່ແຕກຕ່າງຈາກແບບວິທີການຜະລິດ.

<u>ໂຄງລ່າງ</u> ສັງຄົມແມ່ນໝາຍເຖິງລະບອບເສດຖະກິດ, ໝາຍຄວາມ ວ່າທົ່ວຂົງເຂດການພົວພັນແຫ່ງການຜະລິດຂອງສັງຄົມທັງໝົດ ໃນແຕ່ລະ ຂັ້ນ ຂອງວິວັດທະນາການປະຫວັດສາດສັງຄົມ ຊຶ່ງການພົວພັນແຫ່ງການຜະລິດຂອງ ສັງຄົມໄດ້ກ່ຽວພັນກັບລະດັບການຂະຫຍາຍຕົວຂອງກຳລັງການຜະລິດ. ໂຄງ ລ່າງສັງຄົມ ອາດຈະມີທັງລັກສະນະເປັນປໍລະປັກ ແລະ ບໍ່ເປັນປໍລະປັກກັນ . ໂຄງລ່າງສັງຄົມຂາທາດ, ສັກດິນາ ແລະ ນາຍທຶນແມ່ນເປັນປໍລະປັກກັນຍ້ອນ ວ່າມັນສ້າງຂຶ້ນພື້ນຖານກຳມະສິດສ່ວນຕົວ ກ່ຽວກັບພາຫະນະ ການ ຜະ ລິດ ແລະ ບົນພື້ນຖານການພົວພັນແບບຄອບຄອງ ແລະ ບີບຮັດ, ຂູດຮີດຄົນຕໍ່ ຄົນ. ໂຄງລ່າງສັງຄົມນິຍົມບໍ່ເປັນປໍລະປັກກັນແຕ່ຢ່າງໃດ ຍ້ອນວ່າມັນສ້າງຂຶ້ນ ບົນພື້ນຖານກຳມະສິດສ່ວນລວມ ກ່ຽວກັບພາຫະນະການຜະລິດໂດຍປາສະຈາກ ການກົດຂີ່ຂູດຮີດກັນ.

ນອກຈາກໂຄງລ່າງແລ້ວ ຕ້ອງມີໂຄງບົນທີ່ສອດຄ່ອງກັນນຳອີກ. ໂຄງ ບົນປະກອບດ້ວຍທັດສະນະຕ່າງໆຂອງສັງຄົມທາງດ້ານການເມືອງ, ປັດຊະຍາ, ກົດໝາຍ, ສິລະປະ, ສາສະໜາ ແລະ ອື່ນໆ ແລະ ອົງການຈັດຕັ້ງທີ່ກ່ຽວ ພັນກັບທັດສະນະເຫລົ່ານີ້ອີກ. ໂຄງລ່າງຈະກຳນົດໂຄງບົນ ແລະ ການຂະ-ຫຍາຍຕົວຂອງມັນ. ຢູ່ໃນສັງຄົມທີ່ມີຊົນຊັ້ນນັ້ນໂຄງບົນກໍມີລັກສະນະຊົນຊັ້ນນຳ. ໂດຍອີງຕາມທັດສະນະຂອງຕົນຊົນຊັ້ນປົກຄອງກໍຈະສ້າງຕັ້ງອົງການຈັດຕັ້ງ ຈຳ ນວນໜຶ່ງຂຶ້ນເພື່ອປົກປ້ອງສິດຜົນປະໂຫຍດຂອງຊົນຊັ້ນຕົນ.

ໂຄງລ່າງກໍຄືໂຄງບົນຈະຍືນຍົງຄົງຕົວໄດ້ພຽງແຕ່ໃນຊ່ວໄລຍະໃດໜຶ່ງ ເທົ່ານັ້ນ. ຫາກມີການປ່ຽນແປງທາງໂຄງລ່າງແລ້ວ ໂຄງບົນກໍຈະມີການ ຫັນ ປ່ຽນໄປນຳ. ເຊັ່ນ, ການປ່ຽນແປງຈາກໂຄງລ່າງຂອງສັກດິນາຫັນມາ ເປັນ ໂຄງລ່າງທຶນນິຍົມກໍເຮັດໃຫ້ມີການປ່ຽນແປງຈາກໂຄງບົນສັກດິນາມາເປັນໂຄງ ບົນທຶນນິຍົມ; ການກຳເນີດຂອງໂຄງລ່າງສັງຄົມນິຍົມກໍນຳໄປເຖິງການ ກຳ ເນີດຂອງໂຄງບົນສັງຄົມນິຍົມ, ເຖິງການທຳລາຍລົບລ້າງໂຄງບົນທຶນນິຍົມ . ໂດຍທົ່ວໄປຖ້າຫາກວ່າໂຄງບົນກຳເນີດຂຶ້ນຍ້ອນໂຄງລ່າງໃນເມື່ອນັ້ນ ອົງປະ

ກອບສ່ວນໃດຫນຶ່ງຂອງໂຄງບົນໃຫມ່ ອາດເກີດມາຈາກກົກຫຼົ້າ ຮາກຖານ ຂອງສັງຄົມເກົ່າກໍເພາະວ່າຢູ່ໃນສັງຄົມເກົ່າມັນຈະມີແນວຄິດ ແລະ ທັດສະນະ ຕ່າງໆສອດຄ່ອງກັບທັດສະນະຂອງຊົນຊັ້ນທີ່ກ້າວຫນ້າ. ຍົກຕົວຢ່າງຢູ່ໃນ ລະ ບອບທຶນນິຍົມ ແມ່ນເກີດມີແນວຄິດກຳມາຊີບທີ່ສອດຄ່ອງກັບທັດສະນະຫລັກຫມັ້ນ ຊົນຊັ້ນໃຫມ່ປະຕິວັດ-ຄືຊົນຊັ້ນກຳມາຊີບ.

ໂຄງບົນກຳເນີດຂຶ້ນຍ້ອນໂຄງລ່າງ ແຕ່ມັນກໍມີປະຕິກິລິຍາຕໍ່ໂຄງລ່າງ. ໂຄງບົນສົ່ງຜົນສະທ້ອນໃສ່ໂຄງລ່າງຢ່າງແຮງ, ສ້າງເງື່ອນໄຂ ໃຫ້ໂຄງລ່າງ ໄດ້ມີການຈັດສັນຮູບການ ແລະ ມີຄວາມຫນຽວແຫນ້ນຂຶ້ນ. ໂຄງບົນອາດ ຈະ ມີລັກສະນະທັງປະຕິການ ແລະ ທັງກ້າວຫນ້າຕໍ່ໂຄງລ່າງ. ຍົກຕົວຢ່າງ,ໂຄງ ບົນຂອງໂຄງລ່າງທຶນນິຍົມໃນປະຈຸບັນນີ້ ແມ່ນເຮັດຫນ້າທີ່ ທີ່ປະຕິການ.ໃນສະ ໄຫມປະຈຸບັນ ລະບອບທຶນນິຍົມໄດ້ກັບກາຍເປັນສິ່ງທີ່ຖ່ວງດຶງທ່າຂະຫຍາຍ ຕົວ ຂອງກຳລັງການຜະລິດແລ້ວ. ເພື່ອຈະເຮັດໃຫ້ກຳລັງການຜະລິດມີຄວາມ ສາ ມາດຂະຫຍາຍຕົວ ຢ່າງໄດ້ຮັບຜົນດີນັ້ນ ຈຳເປັນຕ້ອງລົບລ້າງກຳມະສິດສ່ວນ ຕົວກ່ຽວກັບພາຫະນະການຜະລິດຂອງທຶນນິຍົມ. ໂຄງບົນຍັງຮັບໃຊ້ໃນການປົກ ປັກຮັກສາກຳມະສິດທີ່ເພີ່ນເອີ້ນວ່າ "ສະຖານທີ່ອັນສັກກະລະບູຊາ" ນຳອີກ . ທັດສະນະຫຼລົ່ານີ້ມັນສ້າງອຸປະສັກໃຫ້ແກ່ການລົບລ້າງການພົວພັນແຫ່ງການຜະ ລິດທຶນນິຍົມ. ຢູ່ໃນລະບອບທຶນນິຍົມ ໂຄງບົນມີບົດບາດປະຕິການ.

ຢູ່ໃນລະບອບສັງຄົມນິຍົມ ໂຄງບົນຂອງໂຄງລ່າງສັງຄົມນິຍົມ ແມ່ນ ມີ ບົດບາດທີ່ກ້າວຫນ້າ. ອຳນາດການປົກຄອງຢູ່ໃນລະບອບສັງຄົມນິຍົມ ແມ່ນນຳ ພາການຂະຫຍາຍຕົວຂອງກຳລັງ ການຜະລິດໃນສັງຄົມ, ຊຸກຍູ້ການຂະ ຫຍາຍຕົວຂອງສັງຄົມນິຍົມ ແລະ ເຄື່ອນໄຫວສ້າງເງື່ອນໄຂເພື່ອແກ້ໄຂບັນຫາ ຕ່າງໆຂອງສັງຄົມນິຍົມ.

ແບບວິທີການຜະລິດວັດຖຸສິ່ງຂອງ ໃນຖານະເປັນສິ່ງເອກະພາບກັນລະ ຫວ່າງກຳລັງການຜະລິດ ແລະ ການພົວພັນແຫ່ງການຜະລິດລວມກັບໂຄງບົນທີ່ ສອດຄ່ອງກັບໂຄງລ່າງນັ້ນ ໄດ້ປະກອບເຂົ້າເປັນ<u>ຮູບຖານສັງຄົມເສດຖະກິດ.</u>

ເປັນທີ່ຮູ້ກັນດີແລ້ວວ່າ ປະຫວັດສາດໂລກມີ ๕ ຮູບຖານສັງຄົມເສດຖະ ກິດດ້ວຍກັນຄື: <u>ຮູບຖານປະຖົມບູຮານ</u>, <u>ຂ້າທາດ</u>, <u>ສັກດິນາ</u>, <u>ທຶນນິຍົມ</u> ແລະ <u>ກອມມູນິດ</u> ຊຶ່ງມີລະບອບສັງຄົມນິຍົມເປັນຂັ້ນທຳອິດ. ຢູ່ໃນແຕ່ລະຮູບຖານເຫຼົ່າ

ມີເສດຖະກິດ, ທັດສະນະ, ແນວຄິດ, ອົງການຈັດຕັ້ງຂອງໃຜມັນ. ການ ຂະຫຍາຍຕົວຂອງຮູບຖານສັງຄົມເສດຖະກິດ ແມ່ນເລີ່ມຕົ້ນແຕ່ຕ່ຳຫາສູງ. ເຊັ່ນ ລະບອບສັກດິນາໄດ້ຖືກສັບປ່ຽນແທນໂດຍລະບອບທຶນນິຍົມ ສ່ວນທຶນນິຍົມ ເອງ ພັດໄດ້ສັບປ່ຽນແທນໂດຍລະບອບສັງຄົມນິຍົມຊຶ່ງເປັນຂັ້ນທຳອິດ ຂອງລະບອບ-ກອມມູນິດ. ພົ້ນຖານແຫ່ງການປະກົດຕົວ, ຂະຫຍາຍຕົວ ແລະ ລົ້ມລະລາຍ ຂອງບັນດາຮູບຖານສັງຄົມເສດຖະກິດນັ້ນ ແມ່ນເປັນກົດເກນຂະຫຍາຍຕົວຂອງ ສັງຄົມ ເຊິ່ງກົດເກນເຫລົ່ານີ້ລັກສະນະພາວະວິໄສ ແລະ ບໍ່ຂຶ້ນກັບ ເຈຕຕະ ນາຂອງຄົນເຮົາແຕ່ຢ່າງໃດ.

ກົດເກນເສດຖະກິດແຫ່ງການ ຂະຫຍາຍຕົວຂອງສັງຄົມ

ທັດສະນະກ-ເລນິນອົງໃສ່ບ່ອນທີ່ວ່າ ເຮົາ ບໍ່ຄວນຖືທຳມະຊາດແລະສັງຄົມເປັນເຫມືອນ ປະກົດການອັນບັງເອີນທີ່ບໍ່ພົວພັນຊຶ່ງກັນແລະ ກັນເລີຍ. ແຕ່ກົງກັນຂ້ານ, ທຸກປະກົດການຂອງທຳມະຊາດ ແລະສັງຄົມ ຍາມ ໃດກໍພົວພັນກັນແລະອົງໃສ່ກັນສະເຫມີ. ການພົວພັນອັນເລິກເຊິ່ງຂອງ ປະກົດ ການນີ້ແມ່ນສະແດງຕົວອອກໃນກົດເກນການຂະຫຍາຍຕົວຂອງທຳມະຊາດແລະ ສັງຄົມ. ສະນັ້ນບັນຫາຂອງວິທະຍາສາດຈຶ່ງແມ່ນໃສ່ເພື່ອຄົ້ນພົບກົດເກນເຫລົ່ານີ້.

ນອນຢູ່ໃນພື້ນຖານການຂະຫຍາຍຕົວຂອງຊີວິດເສດຖະກິດສັງຄົມ ແມ່ນ <u>ບັນດາກົດເກນເສດຖະກິດອັນພາວະວິໄສ</u> ຊຶ່ງໄດ້ກຳນົດການພົວພັນແຫ່ງ ການ ຜະລິດສັງຄົມຫລາຍຮູບການແຕກຕ່າງກັນຂອງຄົນເຮົາ, ຫມາຍຄວາມວ່າການ ພົວພັນຢູ່ໃນຂົງເຂດການຜະລິດ, ການແບ່ງປັນ, ແລກປ່ຽນ ແລະ ຊົມໃຊ້ . ສຳລັບເສດຖະສາດການເມືອງໃນຖານະເປັນວິທະຍາສາດແລ້ວ ການຄົ້ນ ພົບ ແລະ ສຶກສາຄົ້ນຄວ້າການເຄື່ອນໄຫວຂອງກົດເກນເສດຖະກິດແຫ່ງການ ຂະ ຫຍາຍຕົວຂອງສັງຄົມ ແມ່ນມີຄວາມຫມາຍສຳຄັນທີ່ສຸດ.

<u>ກົດເກນຂອງທຳມະຊາດ</u> <u>ແລະ</u> <u>ສັງຄົມ</u> ມີຈຸດລວມຄື <u>ລັກສະນະພາວະ ວິໄສ,</u> ຫມາຍຄວາມວ່າ ມັນກຳເນີດຂຶ້ນ ແລະ ເຄື່ອນໄຫວໂດຍບໍ່ຂຶ້ນກັບສິ່ງທີ່ ວ່າພວກເຮົາຮູ້ຈັກມັນຫລືບໍ່, ພວກເຮົາປາຖະຫນາຢາກໃຫ້ມີການເຄື່ອນ ໄຫວ ຂອງກົດເກນໃດຫນຶ່ງ ຫລືບໍ່ກໍຕາມ. ອັນນີ້ຫມາຍຄວາມວ່າຄົນເຮົາບໍ່ ສາມາດ ປ່ຽນແປງ, ດັດແປງຫລືສັບປ່ຽນກົດເກນເຫລົ່ານີ້ໄດ້. ຄົນເຮົາບໍ່ສາມາດສ້າງ

ກົດເກນໃຫມ່ຂຶ້ນໄດ້ເຊັ່ນດຽວກັນອີກ. ຄົນເຮົາສາມາດພຽງແຕ່ຄົ້ນພົບ ກົດ ເກນເຫລົ່ານີ້ ແລະ ເຄື່ອນໄຫວໂດຍອີງຕາມການເຂົ້າໃຈຕໍ່ກົດເກນດັ່ງກ່າວ. ອັນນີ້ບໍ່ຫມາຍຄວາມວ່າຄົນເຮົາ ຂາດສະມັດຖະພາບຕໍ່ຫນ້າບັນດາກົດເກນເຫຼົ່າ ນັ້ນ. ແຕ່ໃນເມື່ອວ່າຄົນເຮົາໄດ້ຮູ້ຈັກກົດເກນແລ້ວ ເວລານັ້ນ ກໍຈະສາມາດ ຫມູນໃຊ້ມັນເຂົ້າໃນສິດຜົນປະໂຫຍດຂອງສັງຄົມ. ເຊັ່ນວ່າ ໃນເມື່ອຮັບຮູ້ ກົດ ເກນການສອດຄ່ອງການພົວພັນແຫ່ງການຜະລິດກັບລັກສະນະ ແລະລະດັບການ ຂະຫຍາຍຕົວ ກຳລັງການຜະລິດນັ້ນ ຊົນຊັ້ນກຳມາຊີບຂອງບັນດາປະເທດ ສັງ ຄົມນິຍົມຮ່ວມກັບຊາວໄຮ່ນາ ພາຍໃຕ້ການນຳພາຂອງບັນດາພັກກອມມູນິດແລະ ກຳມະກອນ ຈຶ່ງໄດ້ໂຄ່ນລົ້ມອຳນາດຊົນຊັ້ນຂູດຮີດ ແລະ ໄດ້ລົງມືກໍ່ສ້າງສັງຄົມ ໃຫມ່ຂຶ້ນ.

ກົດເກນເສດຖະກິດມີຈຸດພິເສດຕ່າງໆທີ່ເປັນບ່ອນແຕກຕ່າງຈາກ ກົດ ເກນທຳມະຊາດ. ຈຸດພິເສດອັນທີຫນຶ່ງຂອງກົດເກນເສດຖະກິດແມ່ນຢູ່ບ່ອນວ່າ ກົດເກນເຫລົ່ານັ້ນຄົງຕົວບໍ່ຍາວນານ ແລະ ເຄື່ອນໄຫວຢູ່ໃນຊົ່ວໄລຍະປະຫວັດ ສາດໃດຫນຶ່ງເທົ່ານັ້ນ. ພື້ນຖານແຫ່ງການເຄື່ອນໄຫວຂອງກົດເກນເສດຖະກິດ ຄືເງື່ອນໄຂເສດຖະກິດຕົວຈິງຈຳນວນໃດຫນຶ່ງ ຊຶ່ງຫມາຍເຖິງການພົວພັນແຫ່ງ ການຜະລິດ, ໂຄງລ່າງສັງຄົມ. ໃນໄລຍະຂ້າມຜ່ານແຕ່ຮູບຖານສັງຄົມ ຫນຶ່ງ ໄປສູ່ອີກຮູບຖານສັງຄົມຫນຶ່ງນັ້ນ ການພົວພັນແຫ່ງການຜະລິດແບບເກົ່າຈະຕ້ອງ ໄດ້ຢຸດຕິການເຄື່ອນໄຫວ ແລະ ກໍຈະມີການກຳເນີດການພົວພັນແຫ່ງການ ຜະ ລິດແບບໃຫມ່ຂຶ້ນແທນ. ດ້ວຍເຫດນີ້ເອງ ກົດເກນເສດຖະກິດຫນຶ່ງຈະຕ້ອງສູນ ຫາຍໄປ ແລະ ແທນທີ່ຕັ້ງຂອງກົດເກນນັ້ນ ກໍຈະເກີດມີກົດເກນເສດຖະກິດ - ໃຫມ່ຂຶ້ນອີກ.

ກຳມະສິດສ່ວນຕົວກ່ຽວກັບພາຫະນະການຜະລິດເຊິ່ງເປັນພື້ນຖານການ ພົວພັນ ແຫ່ງການຜະລິດຢູ່ໃນລະບອບທຶນນິຍົມນັ້ນ ອຳນວຍຄວາມສະດວກ ແກ່ ພວກນາຍທຶນທຳການຂູດຮີດຊົນຊັ້ນກຳມະກອນ ແລະ ບັງຄັບໃຫ້ທຸກການຂະ ຫຍາຍຕົວຂອງການຜະລິດຮັບໃຊ້ຜົນປະໂຫຍດສ້າງຮັ່ງຄູນມີ ແລະ ຜົນ ກຳໄລ ແກ່ພວກເຂົາ. ດ້ວຍເຫດນັ້ນ <u>ການຜະລິດຄຸນຄ່າສ່ວນເກີນຈຶ່ງເປັນກົດເກນພື້ນ ຖານເສດຖະກິດທີ່ມີລັກສະນະພາວະວິໄສຂອງລະບອບທຶນນິຍົມ.</u>

ກຳມະສິດສ່ວນຕົວກ່ຽວກັບພາຫະນະການຜະລິດ ໄດ້ເຮັດໃຫ້ພວກນາຍ

ທຶນແຕ່ລະຄົນມຸ່ງຫມາຍເສີມຂະຫຍາຍພຽງແຕ່ຂະແຫນງການການຜະລິດຫນຶ່ງທີ່ຕົນຈະໄດ້ຮັບຜົນປະໂຫຍດຫລາຍເທົ່ານັ້ນ. ແຕ່ວ່າສິ່ງດັ່ງກ່າວນີ້ ແມ່ນບໍ່ ອະນຸຍາດໃຫ້ເສີມຂະຫຍາຍເສດຖະກິດແຫ່ງຊາດຢ່າງມີແຜນການໃນລະບອບທຶນນິ-ຍົມ. ເສດຖະກິດທຶນນິຍົມດຳລົງຄົງຕົວຢູ່ໃນເງື່ອນໄຂການຊ່ວງເສັງແລະການຜະລິດແບບອະກະເທດກະແຈກກະຈາຍ ດັ່ງນັ້ນ<u>ການຊ່ວງເສັງກັນ</u> ແລະ <u>ການຜະລິດແບບອະກະເທດກະແຈກກະຈາຍ</u>ຈຶ່ງເປັນ<u>ກົດກົນພາວະວິໄສ ຂອງລະບອບທຶນນິຍົມ</u>ອີກກົດກົນຫນຶ່ງ.

ພາຍຫລັງການລົບລ້າງກຳມະສິດທຶນນິຍົມ ກ່ຽວກັບພາຫະນະ ການຜະລິດນັ້ນ ກົດກົນເສດຖະກິດຂອງລະບອບທຶນນິຍົມ ກໍຈະພອຍຢຸດສະງັກ ການເຄື່ອນໄຫວລົງໄປນຳພ້ອມໆກັນ. ຢູ່ໃນບັນດາປະເທດສັງຄົມນິຍົມ ພາຍຫລັງ-ລົບລ້າງກຳມະສິດສ່ວນຕົວແບບທຶນນິຍົມ ກ່ຽວກັບພາຫະນະການຜະລິດແລ້ວ ກໍໄດ້ເກີດມີກົດກົນເສດຖະກິດອັນໃຫມ່, ສ່ວນອັນເກົ່າກໍຖືກຢຸດຕົລົງ.

ພື້ນຖານການພົວພັນແຫ່ງການຜະລິດສັງຄົມນິຍົມ ແມ່ນກຳມະສິດ ສ່ວນລວມສັງຄົມນິຍົມ ກ່ຽວກັບພາຫະນະການຜະລິດ. ຢູ່ໃນລະບອບ ສັງຄົມນິຍົມ ຊາວຜູ້ອອກແຮງງານອະງເປັນເຈົ້າຂອງພາຫະນະ ການຜະລິດ.ພວກເຂົາເຮັດວຽກເພື່ອຕົນອະງ ເພື່ອສັງຄົມ ຂອງຕົນ. ຍ້ອນແນວນັ້ນ ການຂະຫຍາຍຕົວຂອງການຜະລິດຈຶ່ງແນໃສ່ເພື່ອຕອບສະຫນອງຢ່າງກວ້າງຂວາງ ໃນຄວາມຕ້ອງການດ້ານວັດຖຸກໍຄືດ້ານວັດທະນະທຳຂອງສັງຄົມ. <u>ການຮັບປະກັນຕອບສະຫນອງຄວາມຮຽກຮ້ອງຕ້ອງການດ້ານວັດຖຸກໍຄືດ້ານວັດທະນະທຳ ຢ່າງພຽງພໍ ຂອງສັງຄົມທັງຫມົດນັ້ນແມ່ນເປັນກົດກົນເສດຖະກິດອັນພື້ນຖານ ທີ່ມີລັກສະນະ ພາວະວິໄສຂອງສັງຄົມນິຍົມ.</u>

ກຳມະສິດສ່ວນລວມສັງຄົມນິຍົມ ກ່ຽວກັບພາຫະນະການຜະລິດໄດ້ທ້ອນ ໂຮມເອົາຫມົດທຸກຂົງເຂດເສດຖະກິດແຫ່ງຊາດສັງຄົມນິຍົມເຂົ້າເປັນກົນຈັກອັນ ຫນຶ່ງອັນດຽວ ແລະ ເປັນເສດຖະກິດແຫ່ງຊາດຢ່າງຄົບຖ້ວນອັນດຽວກັນ.ເສດຖະກິດດັ່ງກ່າວນີ້ສາມາດເສີມຂະຫຍາຍໄດ້ຕາມແຜນການເທົ່ານັ້ນ. <u>ການເສີມ ຂະຫຍາຍເສດຖະກິດແຫ່ງຊາດຢ່າງມີແຜນການ ແມ່ນກົດກົນພາວະວິໄສຂອງ ເສດຖະກິດສັງຄົມນິຍົມ.</u>

ຢູ່ໃນແຕ່ລະຮູບຖານສັງຄົມເສດຖະກິດ ປະກອບມີຫລາຍກົດກົນ ເສດ

ຖະກິດ. ກິດເກນສະເພາະຂອງຮູບຖານເຄຮ່ອເທົ່ານັ້ນ ເພິ່ນເອ້ີນວ່າ ກິດເກນ ເສດຖະກິດສະເພາະ. ຢູ່ໃນຈຳນວນກິດເກນເຫລ່ານີ້ ເພິ່ນໄດ້ພິບກິດເກນ - ເສດຖະກິດຕົ້ນຕໍອັນໜຶ່ງທີ່ກຳນົດຈຸດປະສົງຂອງສັງຄົມ ແລະ ກຳນົດເອົາ ພາ ຫະນະຮັບໃຊ້ໃນການບັນລຸຈຸດປະສົງດັ່ງກ່າວ.

ນອກຈາກກິດເກນເສດຖະກິດສະເພາະແລ້ວ ກໍຍັງມີກິດເກນລວມ ອີກ ຊຶ່ງມີຢູ່ໃນທຸກໆຮູບຖານສັງຄົມເສດຖະກິດ. ຕົວຢ່າງ, ໃນຈຳນວນ ກິດເກນ ລວມນັ້ນມີກິດເກນການສອດຄ່ອງການພົວພັນແຫ່ງການຜະລິດກັບລັກສະນະແລະ ລະດັບການຂະຫຍາຍຕົວກຳລັງການຜະລິດ. ມັນສະແດງອອກເຖິງ ສາຍພົວ ພັນອັນຈຳເປັນ ແລະ ພົວພັນຊຶ່ງກັນແລະກັນ ລະຫວ່າງການຜະລິດສັງຄົມ ໔ ດ້ານຄື ກຳລັງການຜະລິດ ແລະ ການພົວພັນແຫ່ງການຜະລິດ. ນອກຈາກກິດ ເກນສະເພາະ ແລະ ກິດເກນລວມແລ້ວ ຍັງມີກິດເກນຈຳນວນໜຶ່ງອີກ ຊຶ່ງມີ ສະເພາະສຳລັບໄລຍະການຂະຫຍາຍຕົວແຫ່ງການຜະລິດຂອງສັງຄົມເທົ່ານັ້ນ. ຕົວຢ່າງ, ກິດເກນຄຸນຄ່າຈະມີຄວາມສັກສິດໄດ້ກໍ່ຕໍ່ເມື່ອວ່າ ບ່ອນໃດມີການຜະ ລິດສິນຄ້າເທົ່ານັ້ນ.

ຈຸດພິເສດອັນທີ່ສອງຂອງກິດເກນເສດຖະກິດ ແມ່ນກ່ຽວກັບການນຳໃຊ້ ກິດເກນເສດຖະກິດເຂົ້າໃນການຮັບໃຊ້ສິດຜົນປະໂຫຍດຂອງສັງຄົມ. ຈຸດພິເສດ ອັນທີ ໔ ແມ່ນຢູ່ບ່ອນວ່າມັນແຕກຕ່າງຈາກກິດເກນວິທະຍາສາດທຳມະຊາດ : ໃນເມື່ອການຄົ້ນພົບ ແລະ ການນຳໃຊ້ກິດເກນອັນໃໝ່ນັ້ນ ຈະຜ່ານຂ້າມ ໄດ້ ໂດຍປົກກະຕິ, ສ່ວນຢູ່ໃນຂົງເຂດເສດຖະກິດແລ້ວ ການຄົ້ນພົບແລະ ໝູນໃຊ້ ກິດເກນໃໝ່ຈະພົບພໍ້ກັບການຕ້ານຢັ້ນຢ່າງຮ້າຍແຮງຈາກຝ່າຍທີ່ຫລ້າຫລັງ. ຢູ່ ໃນສັງຄົມທຶນນິຍົມນັ້ນ ການໝູນໃຊ້ກິດເກນເສດຖະກິດກໍມີລັກສະນະອຶນຍັ້ນ.

ນິຄົມດ້ານຈຸດພິເສດຂອງກິດເກນເສດຖະກິດທີ່ແຕກຕ່າງຈາກ ກິດເກນ ທຳມະຊາດ.

ຢູ່ໃນທຸກແບບວິທີການຜະລິດ, ກິດເກນເສດຖະກິດອາດຈະຖືກນຳ ໃຊ້ ກັນ ແລະ ອາດຈະສະແດງຕົວອອກໄດ້ຢ່າງສັບສົນຫລືອາດຈະຖືກນຳໃຊ້ຢ່າງມີ ສະຕິເປັນເຈົ້າການໄປພ້ອມໆກັນ.

ຢູ່ໃນຮູບຖານເສດຖະກິດສັງຄົມທີ່ເປັນປໍລະປັກກັນຊຶ່ງເປັນບ່ອນທີ່ ກຳ ມະສິດສ່ວນຕົວກ່ຽວກັບພາຫະນະການຜະລິດນັ້ນ ກິດເກນເສດຖະກິດຖືກນຳໃຊ້

ກັນຢ່າງມີຄວາມສັບສົນວຸ້ນວາຍ ໂດຍບໍ່ຂຶ້ນກັບທີ່ວ່າ ກົດເກນເຫລົ່ານັ້ນ ຈະຖືກຮັບຮູ້ດີແລ້ວຫລືບໍ. ຍົກຕົວຢ່າງ, ຢູ່ໃນລະບອບທຶນນິຍົມການຜະລິດມີລັກສະນະລວມ, ທຸກຂະແຫນງການພົວພັນຊຶ່ງກັນແລະກັນຢ່າງຕັດຂາດຈາກກັນບໍ່ໄດ້.ແຕ່ວ່າການຜະລິດພັດນອນຢູ່ບົນພື້ນຖານກຳມະສິດສ່ວນຕົວ, ຫມາຍຄວາມວ່າຢູ່ໃນໂຮງງານຂອງຕົນນາຍທຶນແຕ່ລະຄົນຕົດຕາມ ແລະ ແນໃສ່ເປົ້າຫມາຍ ເພື່ອສ້າງຮັ່ງຄູນມີແກ່ຕົນ. ການຜະລິດເຮັດຫນ້າທີ່ເພື່ອຈຸດປະສົງຊອກຫາເອົາ ຜົນກຳໄລໃຫ້ຫລາຍທີ່ສຸດເທົ່າທີ່ຈະເຮັດໄດ້.

ການກ່ຽວພັນອັນຈຳເປັນແລະ ໄດ້ສັດສ່ວນດູນດ່ຽງລະຫວ່າງຂະແຫນງການຜະລິດເຕັມໄປດ້ວຍຄວາມສັບສົນປົນເປ ແລະ ຄົງຕົວຢ່າງນັບບໍ່ຖ້ວນ . ດ້ວຍເຫດນັ້ນຕໍ່ນາຍທຶນແຕ່ລະຄົນເອງ ກົດເກນເສດຖະກິດຖືວ່າ ເປັນ ກຳລັງແຮງອັນຫນຶ່ງທີ່ຄູມຫົວພວກເຂົາຢ່າງແກ້ບໍ່ຕົກ. ແນ່ນອນທີ່ສຸດ,ໃນກໍລະນີໃດ ຫນຶ່ງພວກນາຍທຶນອາດສາມາດຮູ້ເຫັນກົດເກນເສດຖະກິດທຶນນິຍົມ, ຮູ້ສວຍໃຊ້ ແຕ່ຈະປ່ຽນແປງລັກສະນະສັບສົນວຸ້ນວາຍຂອງກົດເກນເສດຖະກິດນັ້ນພວກເຂົາບໍ່ສາມາດເຮັດໄດ້.

ຢູ່ໃນລະບອບສັງຄົມນິຍົມ ກຳມະສິດສ່ວນລວມກ່ຽວກັບພາຫະນະ ການຜະລິດໄດ້ສ້າງເງື່ອນໄຂສະດວກຫລາຍຢ່າງໃຫ້ແກ່ການຮັບຮູ້ກົດເກນເສດຖະ-ກິດຊຶ່ງຊ່ວຍໃຫ້ຫມູນໃຊ້ກົດເກນເຫລົ່ານີ້ເຂົ້າໃນການຮັບໃຊ້ຜົນປະໂຫຍດ ຂອງສັງຄົມເປັນຢ່າງດີ. ການຫມູນໃຊ້ກົດເກນພາວະວິໄສທາງດ້ານເສດຖະກິດ ຢູ່ໃນລະບອບສັງຄົມນິຍົມມັນຮຽກຮ້ອງໃຫ້ມີສະຕິ,ມີການຈັດຕັ້ງແລະມີການເຄື່ອນໄຫວຢ່າງຫ້າວຫັນຂອງຊາວຜູ້ອອກແຮງງານທຸກໆຄົນ. ບົດບາດອັນໃຫຍ່ຫລວງໃນການຮັບຮູ້ ແລະ ຫມູນໃຊ້ບັນດາກົດເກນພາວະວິໄສ ທາງດ້ານເສດຖະກິດ ເຂົ້າໃນຜົນປະໂຫຍດການກໍ່ສ້າງສັງຄົມກອມມູນິດຢູ່ໃນບັນດາປະເທດສັງຄົມນິ-ຍົມຕ່າງໆນັ້ນແມ່ນຂຶ້ນກັບພັກກອມມູນິດ ແລະ ພັກກຳມະກອນຕ່າງໆ.

ເນື້ອໃນຂອງວິຊາເສດ ຖະສາດການເມືອງ

ເສດຖະສາດການເມືອງສຶກສາຄົ້ນຄວ້າ ກົກເຄົ້າ ແຫ່ງການຂະຫຍາຍຕົວຂອງສັງຄົມ. ກົກເຄົ້າອັນນີ້ ແມ່ນການຜະລິດວັດຖຸສິ່ງຂອງຕ່າງໆ,ແບບວິທີ ການຜະລິດ. ແຕ່ວ່າເສດຖະສາດການເມືອງສຶກສາຄົ້ນຄວ້າການຜະລິດ ພຽງ

ແຕ່ໃນແງ່ທັດສະນະແຫ່ງການພົວພັນເສດຖະກິດລະຫວ່າງມະນຸດດ້ວຍກັນໃນໄລ
ຍະທຳການຜະລິດ. ເສດຖະສາດການເມືອງສຶກສາຄົ້ນຄວ້າໂຄງລ່າງຂອງສັງ
ຄົມ. ທ່ານ ວ.ອີ.ເລນິນ ຂຽນໄວ້ວ່າ "ເສດຖະສາດການເມືອງໂດຍທົ່ວ
ໄປແລ້ວບໍ່ໄດ້ສຶກສາຄົ້ນຄວ້າ "ການຜະລິດ" ແຕ່ຫາກແມ່ນຄົ້ນຄວ້າການພົວພັນ
ສັງຄົມຂອງຄົນເຮົາໃນການຜະລິດ, ລະບຽບສັງຄົມຂອງການຜະລິດ " ๑).
ນອກຈາກນີ້ແລ້ວ ເສດຖະສາດການເມືອງ ຍັງໄດ້ສຶກສາຄົ້ນຄວ້າ ການພົວພັນ
ຊຶ່ງກັນ ແລະ ກັນລະຫວ່າງກຳລັງການຜະລິດ ແລະ ການພົວພັນແຫ່ງການຜະ
ລິດ. ພ້ອມດຽວກັນກໍໄດ້ສຶກສາເບິ່ງໂຄງບົນນຳອີກ ຍ້ອນວ່າໂຄງບົນ ໄດ້ກຳ
ເນີດເກີດຂຶ້ນຈາກໂຄງລ່າງ ແລະ ສິ່ງຜົນສະທ້ອນຕໍ່ໂຄງລ່າງຢ່າງຫລວງຫຼາຍ.

<u>ສະຫລຸບແລ້ວ ເນື້ອໃນຂອງວິຊາເສດຖະສາດການເມືອງ ແມ່ນ ການ
ພົວພັນແຫ່ງການຜະລິດ (ເສດຖະກິດ) ຂອງຄົນເຮົາ</u> ຊຶ່ງປະກອບດ້ວຍ: ຮູບ
ການກຳມະສິດກ່ຽວກັບພາທະນະການຜະລິດ, ສະພາບການຂອງຊົນຊັ້ນ ແລະ
ຊັ້ນຄົນຕ່າງໆໃນການຜະລິດ ແລະ ການພົວພັນຊຶ່ງກັນແລະກັນ ລະຫວ່າງພວກ
ເຂົາເຈົ້າ; ຮູບການໃນການແບ່ງປັນອັດຖຸສິ່ງຂອງຕ່າງໆ.

<u>ດັ່ງນັ້ນເສດຖະສາດການເມືອງຈຶ່ງແມ່ນວິທະຍາສາດອັນໜຶ່ງ ທີ່ເວົ້າ
ເຖິງການຂະຫຍາຍຕົວຂອງການພົວພັນແຫ່ງການຜະລິດໃນສັງຄົມ, ໝາຍເຖິງ
ການພົວພັນເສດຖະກິດຂອງຄົນເຮົາ. ເສດຖະສາດການເມືອງໄດ້ວິເຄາະວິ-
ໄຈກົດເກນການຄວບຄຸມນຳພາການຜະລິດ, ການແບ່ງປັນ, ການແລກ ປ່ຽນ
ແລະ ການຊົມໃຊ້ອັດຖຸສິ່ງຂອງຕ່າງໆຢູ່ໃນສັງຄົມມະນຸດ ໃນລະດັບການຂະ
ຫຍາຍຕົວຕ່າງໆຂອງສັງຄົມນັ້ນ.</u>

ຈາກນິຍາມຂອງເສດຖະສາດການເມືອງ ທີ່ກ່າວມານີ້ຈຶ່ງເຫັນແຈ້ງໄດ້
ວ່າ ເສດຖະສາດການເມືອງເປັນວິທະຍາການປະຫວັດສາດ. ມັນສະແດງໃຫ
ເຫັນເຖິງການຂະຫຍາຍຕົວຂອງສັງຄົມຈາກລະດັບຕ່ຳໄປສູ່ລະດັບສູງຂຶ້ ແນວ
ໃດ, ເຖິງຊ່ວໄລຍະການຂະຫຍາຍຕົວຂອງປະຫວັດສາດໄດກະກຽມຫາງຫາ-
ສິ່ງທີ່ຈຳເປັນຢ່າງພາວະວິໄສຢ່າງໃດແດ່ ເພື່ອໄຊຊະນະຂອງແບບວິທີການຜະ
ລິດແບບກອມມູນິດ.

---

๑) ວ.ອີ.ເລນິນ. ນິພົນຄົບຊຸດ, ເຫລັ້ມ ນິ, ໜ້າ ๕ນິ.

ເສດຖະສາດການເມືອງ ແມ່ນວິທະຍາສາດຊົນຊັ້ນ, ວິທະຍາສາດທີ່ມີ ລັກສະນະພັກ ມັນກວມລວມເອົາບັນຫາຕ່າງໆໃນການພົວພັນເສດຖະກິດ ລະ ຫວ່າງມະນຸດ ແລະ ຊົນຊັ້ນຕ່າງໆດ້ວຍກັນ. ເສດຖະສາດການເມືອງ ພົວພັນ ເຖິງສິດຜົນປະໂຫຍດຂອງຊຸມຊົນເຫລົ່ານີ້.

ການດັບສູນລະບອບທຶນນິຍົມ ແລະ ໄຊຊະນະຂອງລັດທິກອມມູນິດ ຈະ ຫລີກເວັ້ນບໍ່ໄດ້ບໍ ? ຕໍ່ຄຳຖາມນີ້ ແນ່ນອນທີ່ສຸດ ເສດຖະສາດການເມືອງຂອງ ພວກນາຍທຶນຈະຕ້ອງຕອບປະຕິເສັດໄປທາງລົບ ຍ້ອນວ່ານັນຮັບໃຊ້ ສິດຜົນປະ ໂຫຍດຂອງລະບອບຫນຶ່ງທີ່ກາຍເປັນສິ່ງທີ່ຖ່ວງດຶງການຂະຫຍາຍຕົວຂອງສັງຄົມ ແລະ ມັນຈະຕ້ອງພັງທະລາຍລົງ.

ບັນດານັກເສດຖະສາດນາຍທຶນ ທັງຫລາຍຕ່າງກໍເຄີຍມີຄວາມສາມາດ ວິເຄາະເບິ່ງການເຄື່ອນໄຫວຕົວຈິງແບບພາວະວິໄສໄດ້ຂະຫນາດໃດຫນຶ່ງພຽງ ແຕ່ຄາວສະໄຫມທີ່ພວກນາຍທຶນເປັນຊົນຊັ້ນເອກເຫນືອກວ່າຫມູ່ ແລະ ໃນສະ ໄຫມທີ່ການຂະຫຍາຍຕົວຂອງລັດທິທຶນນິຍົມຍັງສອດຄ່ອງກັບກົດເກນອັນ ພາວະ ວິໄສແຫ່ງການຂະຫຍາຍຕົວຂອງສັງຄົມເທົ່ານັ້ນ. ແຕ່ວ່າວັນເວລາດັ່ງກ່າວມັນ ພັດໄດ້ຜ່ານພົ້ນໄປດົນນານແລ້ວ. ນັບແຕ່ເວລາທີ່ຊົນຊັ້ນກຳມະກອນໄດ້ ກາຍ ເປັນກຳລັງແຮງອັນຫນຶ່ງທີ່ຕ້ານພວກນາຍທຶນ ແລະ ການເຕີບໃຫຍ່ ຂະຫຍາຍ ຕົວຂອງການຕໍ່ສູ້ຊົນຊັ້ນກໍກ້າວໄປເຖິງລະດັບສູງຈົນວ່ານັນສາມາດດັບສູນ ລັດທິ ທຶນນິຍົມນັ້ນ, ເສດຖະສາດການເມືອງຂອງພວກນາຍທຶນສູນເສຍຄຸນລັກສະນະ ແບບວິທະຍາສາດ. ຫນ້າທີ່ປະຈຸບັນຂອງມັນຄືປ້ອງກັນສະຕະວັດແຫ່ງທຶນນິຍົມ-ໃຫ້ຢູ່ລອດ ແລະ ຕ້ານແນວຄິດຊົນຊັ້ນກຳມະກອນ.

ການສຶກສາຄົ້ນຄວ້າເສດຖະສາດການເມືອງ ບົນພື້ນຖານວິທະຍາສາດ ນັ້ນ ໄດ້ກະທຳໂດຍບັນດາຜູ້ນຳຂອງຊົນຊັ້ນກຳມະກອນຄື ມາກ,ອັງແກນ, ເລ ນິນ.

ຢູ່ໃນບົດນິພົນອັນສຳຄັນຂອງທ່ານ ມາກ ຄື "ທຶນ" ໄດ້ທ້ອນໂຮມ ທຸກ ສິ່ງທຸກຢ່າງຊຶ່ງມາກໄດ້ຄົ້ນພົບຢູ່ໃນຂົງເຂດເສດຖະສາດການເມືອງກ່ອນຍຸກສະ ໄຫມເລນິນ. ບົນພື້ນຖານການວິໄຈແບບວິທະຍາສາດລະບອບທຶນນິຍົມແລ້ວ ຢູ່ ໃນບົດນິພົນດັ່ງກ່າວນີ້ ກໍສະແດງໃຫ້ເຫັນວ່າ ການພັງທະລາຍຂອງລັດທິ ທຶນນິ ຍົມ ແລະ ການສ້າງຕັ້ງອຳນາດການປົກຄອງຊົນຊັ້ນກຳມາຊີບ, ໄຊຊະນະຂອງ

ສັງຄົມກອມມູນິດ-ແມ່ນຫລີກເວັ້ນບໍ່ໄດ້ຢ່າງເດັດຂາດ.

ຢູ່ໃນເງື່ອນໄຂປະຫວັດສາດໃຫມ່ ອ.ອ.ເລນິນ ກໍໄດ້ສືບຕໍ່ພາລະກິດ ຂອງມາກ ແລະ ອັງແກນ ໂດຍຍົກເອົາເສດຖະສາດການເມືອງ ຂັ້ນສູ່ລະດັບ ໃຫມ. ຜົນງານທີ່ເດັ່ນເປັນປະຫວັດສາດຂອງທ່ານ ອ.ອ.ເລນິນ ນັ້ນ ແມ່ນ ການປະກອບທິດສະດີວິທະຍາສາດ ວ່າດ້ວຍຈັກກະພັດນິຍົມ, ວິເຄາະທາດແທ ຈັກກະພັດນິຍົມ, ບັນດາຂໍ້ຂັດແຍ່ງ ແລະ ກິດເກມຕ່າງໆ. ການວິເຄາະລັດທິ ຈັກກະພັດນິຍົມຢູ່ໃນປຶ້ມເຫລັ້ມຫນຶ່ງຊື່ວ່າ "ລັດທິຈັກກະພັດນິຍົມ ຄືໄລຍະ ສຸດ ທ້າຍຂອງລັດທິທຶນນິຍົມ" ແລະ ກໍຄືຢູ່ໃນບົດນິພົນອື່ນໆອີກຂອງທ່ານ ເລນິນນັ້ນ ລ້ວນແຕ່ແມ່ນການສືບຕໍ່ ແລະ ການເສີມຂະຫຍາຍແນວຄິດ "ທຶນ" ຂອງທ່ານ ກ.ມາກ ໂດຍກົງ. ການວິເຄາະລັດທິຈັກກະພັດນິຍົມ ແລະກ່ອນອື່ນຫມົດແມ່ນ ການຄົ້ນພົບກິດເກມຂາດຄວາມດຸນດ່ຽງ ໃນການຂະຫຍາຍຕົວຂອງລັດທິ ທຶນນິ ຍົມທາງດ້ານເສດຖະກິດ ແລະ ການເມືອງ ໃນຍຸກສະໄຫມ ຈັກກະພັດນິຍົມ ໂດຍທ່ານ ເລນິນ ນັ້ນ ໄດ້ກາຍເປັນພື້ນຖານຕົ້ນຕໍແກ່ທິດສະດີປະຕິວັດ ກໍາມາ ຊີບ.

ວ.ອ.ເລນິນ ໄດ້ຂຽນວ່າທໍານາຍ ການປະຕິວັດຈະໄດ້ຮັບໄຊຊະນະ ຢູ່ ໃນປະເທດຫນຶ່ງ ຫລືຢູ່ໃນ ๘-๙ ປະເທດກ່ອນ. ການຄົ້ນພົບດັ່ງກ່າວນີ້ ໄດ ກາຍເປັນພື້ນຖານໃຫ້ແກ່ຍຸດທະສາດ ແລະ ຍຸດທະວິທີຂອງພັກກອມມູນິດ ລັດ ເຊຍໃນໄລຍະການກະກຽມ ແລະ ນໍາພາມະຫາປະຕິວັດສັງຄົມນິຍົມ ເດືອນຕຸ ລາ ແລະ ໃນການຕໍ່ສູ້ເພື່ອໄຊຊະນະສັງຄົມນິຍົມຢູ່ ส.ส.ส.ร ໃນໄລຍະ ຕໍ່ ມາ. ຊື່ສຽງຂອງ ເລນິນ ແມ່ນພົວພັນໂດຍກົງກັບການກໍາເນີດ ເສດຖະສາດ ການເມືອງສັງຄົມນິຍົມ.

ທິດສະດີເສດຖະສາດ ມາກ-ເລນິນ ໄດ້ຖືກເສີມຂະຫຍາຍຢ່າງກ້ວາງ ຂວາງຢູ່ໃນບັນດາມະຕິຕົກລົງຕ່າງໆຂອງພັກກອມມູນິດສະຫະພາບໂຊວຽດ,ບັນ ດາພັກກອມມູນິດ ແລະ ພັກກໍາມະກອນຂອງປະເທດຕ່າງໆ. ຍົກຕົວຢ່າງການ ເຕີບໃຫຍ່ຂະຫຍາຍຕົວຢ່າງມີທິດທິດປະດິດສ້າງຂອງລັດທິມາກ-ເລນິນ ເວົ້າ ລວມ ແລະ ເສດຖະສາດການເມືອງ ມາກ-ເລນິນ ເວົ້າສະເພາະແມ່ນການ ສຶກສາຄົ້ນຄວ້າບັນດາບັນຫາຫລັກການອັນສໍາຄັນຄື: ວ່າດ້ວຍສອງໄລຍະ ແຫ່ງ ການຂະຫຍາຍຕົວຂອງສັງຄົມກອມມູນິດ ແລະ ບັນດາກິດເກມກ່ຽວກັບ ການ

ກ້າວຈ່າກສັງຄົມນິຍົມໄປສູ່ສັງຄົມກອມມູນິດ; ວ່າດ້ວຍການກໍ່ສ້າງພື້ນຖານວັດຖຸ ເຕັກນິກຂອງສັງຄົມກອມມູນິດ; ວ່າດ້ວຍເສັ້ນທາງຂະຫຍາຍຕົວ ແລະ ການ ຂະຫຍັບຕົວເຂົ້າຫາກັນລະຫວ່າງສອງຮູບການຂອງກຳມະສິດສັງຄົມນິຍົມ, ວ່າ ດ້ວຍການລຶບລ້າງຄວາມແຕກຕ່າງລະຫວ່າງອຸ້ມຊັ້ນ ແລະ ການເສີມສ້າງ ສິດ ສະເໝີພາບສັງຄົມນິຍົມຢ່າງສົມບູນ; ວ່າດ້ວຍການຈັດຕັ້ງການພົວພັນກັນແບບ ກອມມູນິດ; ວ່າດ້ວຍບັນດາເງື່ອນໄຂ ເພື່ອປະຕິບັດຫລັກການຕົ້ນຕໍຂອງສັງຄົມ ກອມມູນິດນັ້ນຄື "ເຮັດຕາມຄວາມສາມາດ, ຈຸມໃຊ້ຕາມຄວາມຕ້ອງການ" ; ວ່າດ້ວຍພື້ນສຳເລັດຂອງການປະຕິວັດໃນຂົງເຂດວັດທະນະທຳ ແລະ ການ ກໍ່ ສ້າງຄົນໃໝ່, ສຶກສາຄົ້ນຄວ້າບັນຫາຕ່າງໆຂອງການຈັດຕັ້ງສັງຄົມການເມືອງ ໃນໄລຍະການກ້າວໄປສູ່ລະບອບກອມມູນິດ.

<u>ຫລັກການເສດຖະສາດການເມືອງ ແມ່ນຫລັກການວັດຖຸນິຍົມສັດຈະອໍ-ພາກ.</u> ອັນມີໝາຍເຖິງ: ຂໍໜຶ່ງ-ການຄົ້ນຄວ້າເບິ່ງການພົວພັນ ແຫ່ງການຜະ ລິດຢູ່ໃນໄລຍະເວລາແຫ່ງການກຳເນີດ ແລະ ການຂະຫຍາຍຕົວຂອງມັນ , ໝາຍເຖິງການຄົ້ນຄວ້າໃນແງ່ທັດສະນະປະຫວັດສາດ; ຂໍ້ສອງ-ການຄົ້ນຄວ້າ ໄລຍະເວລາຄັ່ງກ່າວໃນຖານະເປັນຂະການກະທຳຕົວຈິງຢ່າງພາວະວິໄສ ໝາຍ ເຖິງການຄົ້ນຄວ້າໃນແງ່ທັດສະນະວັດຖຸນິຍົມ; ຂໍ້ສາມ-ການພິຈາລະນາ ຂໍ້ຂັດ ແຍ່ງທີ່ສົ່ງຜົນສະທ້ອນໃຫ້ແກ່ການຜະລິດຂອງສັງຄົມ, ໝາຍເຖິງການພິຈາລະ ນາບັນຫາໃນແງ່ທັດສະນະສັດຈະວິພາກ.

ຄວາມໝາຍຂອງເສດຖະສາດການເມືອງມາກ-ເລນິນ ແມ່ນຫຍັງ ?

ຄວາມໝາຍຂອງເສດຖະສາດການເມືອງມາກ-ເລນິນ ແມ່ນມັນ ປະ ກອບຄວາມຮູ້ອັນແຫລມຄົມກ່ຽວກັບກົດເກນການຂະຫຍາຍຕົວຂອງເສດຖະກິດ-ສັງຄົມໃຫ້ແກ່ອຸ້ມຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານທັງໝົດແລະຊ່ວຍ ແກ້ໄຂຫລາຍບັນຫາທີ່ເກີດຂຶ້ນຕໍ່ໜ້າເຂົາເຈົ້າຢ່າງໄດ້ຮັບຜົນດີ. ເສດຖະສາດ ການເມືອງຍັງໄດ້ສ່ອງແສງໃຫ້ຊາວຜູ້ອອກແຮງງານຢູ່ໃນປະເທດທຶນນິຍົມຕ່າງ ຕ່າງຮູ້ເຫັນຕົ້ນເຫດແຫ່ງຄວາມທຸກຍາກກາກກຳ ແລະ ການຂາດສິດທິຂອງຕົນ. ເສດຖະສາດການເມືອງສ່ອງແສງໃຫ້ເຫັນວ່າ ການກົດຂີ່ຂູດຮີດອຸ້ມຊັ້ນ ກຳມະ ກອນ ແລະ ຊາວຜູ້ອອກແຮງງານທຸກໆຄົນນັ້ນ ບໍ່ແມ່ນເກີດຂຶ້ນດ້ວຍ ສາຍເຫດ ບັງເອີນໃດໜຶ່ງ ແລະ ບໍ່ແມ່ນເກີດຂຶ້ນດ້ວຍການບີບບັງຄັບຂົ່ມເຫັງ ຂອງພວກ

ມາຍທຶນໃດໜຶ່ງ ແຕ່ມັນຫາກພົວພັນເຖິງກິດຈະກຳມູນຖານລະບອບທຶນນິຍົມທັງໝົດ. ຍ້ອນແນວນັ້ນ ມີແຕ່ການຕໍ່ສູ້ຊຸ້ນຊຸ້ນແບບບໍ່ປະນີປະນອມ, ການລົບລ້າງລັດທຶນນິຍົມ ແລະ ການສ້າງຕັ້ງອຳນາດການປົກຄອງຜະດັດການກຳມາຊີບເທົ່ານັ້ນ ຈຶ່ງຈະປົດປ່ອຍຂັນດາຊາວຜູ້ອອກແຮງງານທັງໝົດ ອອກຈາກການກົດຂີ່ຂູດຮີດໄດ້.

ເສດຖະສາດການເມືອງມາກ-ເລນິນ ໄດ້ເຜີຍແຜ່ໃຫ້ປະຊາຊາດ ຂັນດາປະເທດກຳລັງພັດທະນາຮູ້ເຫັນຕົ້ນເຫດແຫ່ງຄວາມທຸກຍາກຫລ້າຫລັງ ຂອງຕົນ. ເສດຖະສາດການເມືອງສະແດງໃຫ້ເຫັນວ່າ ການກົດຂີ່ຂົ່ມເຫັງ ແລະ ການປຸ້ນສະດົມປະຊາຊາດ ຂັນດາປະເທດຫົວເມືອງຂຶ້ນ ແລະ ຄົ່ງຫົວເມືອງຂຶ້ນຕ່າງໆນັ້ນ ແມ່ນເກີດຈາກຍ້ອນລັດທິຈັກກະພັດນິຍົມ ແລະ ລະບົບລ່າຫົວ - ເມືອງຂຶ້ນຂອງມັນ. ໃນຕະຫລອດຫລາຍສະຕະວັດຜ່ານມາ ໂດຍການ ຫລອກລວງ ແລະ ການນຳໃຊ້ຄວາມຮຸນແຮງນັ້ນ ຂັນດາປະເທດຈັກກະພັດນິຍົມ ຈຳນວນໜ້ອຍດຽວ ໄດ້ຄອບຄອງມວນມະນຸດອັນມະຫາສານຢູ່ໃນປະເທດ ຫົວເມືອງຂຶ້ນຕ່າງໆ ແລະ ຮັດໃຫ້ພວກເຂົາເຈົ້າຕົກຢູ່ໃນສະພາບເປັນຂ້າທາດ. ມີແຕ່ການຕໍ່ສູ້ອັນດັດດຽວຕາມຈັກກະພັດນິຍົມ ແລະ ຕ້ານທຸກໆປະກົດການຂອງມັນເທົ່ານັ້ນ ຈຶ່ງຈະນຳເອົາປະຊາຊາດຂັນດາປະເທດອະດີດຫົວເມືອງຂຶ້ນ ແລະ ຄົ່ງຫົວເມືອງຂຶ້ນເຫລົ່ານັ້ນອອກສູ່ເສັ້ນທາງແຫ່ງຄວາມເປັນເອກະລາດ ແຫ່ງຊາດ ແລະ ຄວາມກ້າວໜ້າ.

ເສດຖະສາດການເມືອງມາກ-ເລນິນ ຍັງຊີ້ໃຫ້ເຫັນທິດທາງທີ່ຄວນຈະຕ້ອງດຳເນີນການກໍ່ສ້າງສັງຄົມນິຍົມ ແລະ ສັງຄົມກອມມູນິດຢູ່ໃນຂັນດາປະ - ເທດທີ່ກຳລັງປົດປ່ອຍໃໝ່ຈາກແອກປົກຄອງທຶນນິຍົມ, ເປີດເຜີຍຈຸດດ່ຳຂອງລະບົບເສດຖະກິດສັງຄົມນິຍົມທີ່ຢູ່ເໜືອລະບົບເສດຖະກິດທຶນນິຍົມ, ເປີດເຜີຍໃຫ້ເຫັນເຖິງໄຊຊະນະອັນຫລີກລ້ຽງບໍ່ໄດ້ຂອງສັງຄົມກອມມູນິດ ຄວາມຮູ້ ດ້ານກົດໝາຍເສດຖະສາດການເມືອງມັນຍັງຊ່ວຍເປີດກວ້າງໃຫ້ມະຫາຊົນຮັບຮູ້ ໄດ້ເຖິງຄວາມອາດສາມາດໃນການປະກອບສ່ວນຢ່າງມີສະຕິເຂົ້າໃນການ ກໍ່ສ້າງສັງຄົມນິຍົມ, ສັງຄົມກອມມູນິດ, ເສີມຂະຫຍາຍຫົວຄິດລິເລີ່ມຂອງຊາວຜູ້ອອກແຮງງານ, ສຶກສອນອົບຮົມໃຫ້ເຂົາເຈົ້າຮູ້ຮັດວຽກດ້ວຍຜົນງານທີ່ໃຫ້ການຜະລິດສູງ, ສ້າງເງື່ອນໄຂໃຫ້ຊາວຜູ້ອອກແຮງງານທຸກຄົນກາຍເປັນນັກກໍ່ສ້າງ ທີ່

ຫ້າວຫັນຂອງສັງຄົມໃໝ່.

ຖ້າຫາກຈຶ່ມຂັ້ນກຳມາຊີບ ແລະ ຊາວຜູ້ອອກແຮງງານທັງຫລາຍ ກຳ ແໜ້ນເສດຖະສາດການເມືອງ ມາກ-ເລນິນ ໄດ້ມັນຈະເປັນອາວຸດທີ່ ແຂງ ແກ່ນທີ່ສຸດໃນການຕໍ່ສູ້ເພື່ອລັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະ ສັງຄົມນິຍົມ.

ພາກ ຫນຶ່ງ

ແບບວິທີການຜະລິດກ່ອນສະໄຫມທຶນນິຍົມ

ຢູ່ໃນພາກນີ້ ພວກເຮົາຈະສຶກສາເບິ່ງຢ່າງຫຍໍ້ໆ ກ່ຽວກັບການກຳເນີດ, ການຂະຫຍາຍຕົວ ແລະ ຕົ້ນເຫດແຫ່ງການດັບສູນ ຂອງແບບວິທີ ການຜະລິດ ສະໄຫມປະຖົມບູຮານ, ຂ້າທາດ ແລະ ສັກດິນາ.

๑. ແບບວິທີການຜະລິດສະໄຫມປະຖົມບູຮານ

ວິທະຍາສາດ ໄດ້ຢັ້ງຢືນໃຫ້ເຫັນວ່າ ຄວາມແຕກຕ່າງພົ້ນຖານ ລະ ຫວ່າງຄົນ ແລະ ສັດປະເພດໃຫ້ເຫັນໃນຕອນທີ່ຄົນເຮົາ ເລີ່ມຮູ້ຈັກປະດິດສ້າງ ເຄື່ອງມືແຮງງານຕ່າງໆ (ທຳອິດແມ່ນເປັນເຄື່ອງມືແຮງງານປະຖົມປະຖານທີ່ ສຸດ). ພ້ອມດຽວກັນກັບການປະດິດສ້າງເຄື່ອງມືແຮງງານຕ່າງໆນັ້ນ ກໍເລີ່ມ ເກີດມີແຮງງານມະນຸດຂຶ້ນ. ຜ່ານການອອກແຮງງານຕະຫລອດມາ ຕົ້ນຫມາ ສອງເບື້ອງກໍ່ຄ່ອຍໆກາຍມາເປັນມືຄົນເຮົາ. ດ້ວຍຄວາມສະດວກສະບາຍຂອງ ມືໃນການເຄື່ອນໄຫວອະໄວງານນັ້ນ ຄົນເຮົາ ເລີ່ມໃຊ້ສອງຕົ້ນຫລັ່ງຍ່າງຍ້າຍ-ໄດ້ຢ່າງສະດວກຂຶ້ນເລື້ອຍໆມາ. ພ້ອມດຽວກັນກັບການປະດິດສ້າງ ເຄື່ອງມື ແຮງງານແບບງ່າຍດາຍນັ້ນ ກໍເກີດມີຄວາມຈຳເປັນທາງດ້ານການພົວພັນຂອງ ຄົນສະໄຫມປະຖົມບູຮານ ເພື່ອການນຳໃຊ້ເຄື່ອງມືແຮງງານຢູ່ໃນໄລຍະ ການ ອອກແຮງງານ. ຍ້ອນແນວນັ້ນ ຈຶ່ງເກີດມີພາສາຂຶ້ນ. ແຮງງານແລະ ພາສາ ໄດ້ສ້າງຜົນສະທ້ອນຢ່າງສຳຄັນແກ່ການຂະຫຍາຍຕົວ ຂອງມັນສະຫມອງ. ເວົ້າ ລວມແລວ, ແຮງງານໄດ້ສ້າງມະນຸດຂຶ້ນມາ ແລະ ຍ້ອນການອອກແຮງ ງານ

ນັ້ນຄວງສັງຄົມມະນຸດຈຶ່ງໄດ້ເກີດມີຂຶ້ນ ແລະ ກ້າວສູ່ການຂະຫຍາຍຕົວເລື້ອຍໆ ມາ.

ຮູບຖານສັງຄົມເສດຖະກິດທຳອິດແມ່ນ <u>ສັງຄົມສະຫະຊີບປະຖົມບູຮານ-</u> ຊຶ່ງມີໄລຍະຍາວນານຫລາຍແສນປີ. ຈາກນັ້ນມາກໍເລີ່ມເຂົ້າສູ່ການ ຂະຫຍາຍ ຕົວຂອງສັງຄົມ. ທຳອິດຄົນເຮົາຢູ່ໃນສະພາບເຄິ່ງປ່າເຖື່ອນ ແລະ ບໍ່ສາມາດ ຕໍ່ສູ້ກັບໄພທຳມະຊາດ. ພວກເຂົາເອົາພືດພັນ ທີ່ພົບພໍ້ຢູ່ຕາມທຳມະຊາດ ເປັນ ລັກສະນະສຳເລັດຮູບແລ້ວເຊັ່ນ: ຫົວມັນ, ຫມາກໄມ້ປ່າ, ແກ່ນຫມາກໄມ້ - ແລະ ອື່ນໆເປັນອາຫານ.

ເຄື່ອງມືແຮງງານທຳອິດຂອງມະນຸດແມ່ນປ່ຽງກ້ອນຫີນຄົມ ແລະ ໄມ້ ຄ້ອນ. ຕໍ່ມາດ້ວຍມີການສະສົມບົດຮຽນຢ່າງຫລ້າຊ້ານັ້ນຄວງຈຶ່ງເຮັດໃຫ້ມະນຸດ ໄດ້ປະດິດສ້າງເຄື່ອງມືແບບງ່າຍດາຍທີ່ສຸດເພື່ອໃຊ້ເປັນປະໂຫຍດໃນການຕ່ອຍ ຕີ, ,ຕັດປາດ ແລະ ປອກຝານຕ່າງໆ.

ຄວາມຫມາຍອັນສຳຄັນອີກປະການຫນຶ່ງ ໃນການຕໍ່ສູ້ກັບທຳມະຊາດ - ແມ່ນການຄົ້ນພົບໄຟ. ໄຟໄດ້ສ້າງເງື່ອນໄຂແກ່ມະນຸດປະຖົມບູຮານໃຫ້ມີ ອາ ຫານການກິນຫລາຍຢ່າງຕື່ມອີກ. ການປະດິດສ້າງຫນ້າໄມ້ ແລະ ທະນູ ກໍໄດ້ ກາຍເປັນລະດັບໃຫມ່ອີກໃນການຂະຫຍາຍຕົວຂອງກຳລັງການຜະລິດຂອງ ມະ ນຸດປະຖົມບູຮານ. ດ້ວຍອາໄສສິ່ງດັ່ງກ່າວນີ້ ມະນຸດໄດ້ເລີ່ມທຳການລ່າ ສັດ ຮ້າຍ ແລະ ກໍໄດ້ນຳເອົາຊີ້ນສັດນັ້ນມາເປັນອາຫານເສີມຕື່ມອີກ. ຍ້ອນ ການ ຂະຫຍາຍຕົວໃນການລ່າສັດ ຈຶ່ງເກີດມີການລ້ຽງສັດສະໄຫມປະຖົມບູຮານຂຶ້ນ. ມະນຸດກໍໄດ້ເລີ່ມຮູ້ຈັກລ້ຽງສັດບ້ານນຳ.

ບາດກ້າວຕໍ່ມາໃນການຂະຫຍາຍຕົວຂອງກຳລັງການຜະລິດກໍແມ່ນການ ກຳເນີດການປູກຝັງ. ເປັນເວລາດົນນານທີ່ການປູກຝັງປະຖົມບູຮານໄດ້ຕົກ ຢູ່ ໃນລະດັບຕຳ່ທີ່ສຸດ. ການນຳໃຊ້ງົວຄວາຍເປັນກຳລັງລາກແກ່ໄດ້ເຮັດໃຫ້ວຽກ ງານການປູກຝັງມີຜົນຜະລິດສູງກວ່າ, ການປູກຝັງກໍໄດ້ມີພື້ນຖານຫມັ້ນຄົງ . ມະນຸດສະໄຫມປະຖົມບູຮານກໍໄດ້ເລີ່ມກ້າວເຂົ້າສູ່ການດຳລົງຊີວິດ ແບບຢູ່ກັບທີ່ ຢ່າງເປັນປົກກະຕິດີ.

ພື້ນຖານຕົ້ນຕໍຂອງການພົວພັນແຫ່ງການຜະລິດຢູ່ໃນສັງຄົມປະຖົມບູຮານ ແມ່ນກຳມະສິດສ່ວນລວມຂອງແຕ່ລະກຸ່ມຊົນ ກຽວກັບພາຫະນະການຜະລິດແບບ

ປະຖົມປະຖານໂດຍສະເພາະແລ້ວແມ່ນກ່ຽວກັບເຄື່ອງມືແຮງງານ. ໃນໄລຍະນັ້ນ ກຳມະສິດສ່ວນລວມແມ່ນສອດຄ່ອງກັບລະດັບການຂະຫຍາຍຕົວຂອງກຳລັງການຜະລິດ. ຢູ່ໃນສັງຄົມສະໄຫມປະຖົມບູຮານນັ້ນ ເຄື່ອງມືແຮງງານ ຫລ້າຫລັງທີ່ສຸດ ຈົ່ງເຮັດໃຫ້ມະນຸດປະຖົມບູຮານບໍ່ສາມາດຢູ່ຢ່າງໂດດດ່ຽວໄດ້ ໃນການຕໍ່ສູ້ຕ້ານໄພທຳມະຊາດ ແລະ ການບຸກລຸກລົບກວນ ຈາກບັນດາສັດຮ້າຍຕ່າງໆ. ດ້ວຍເຫດນີ້ ມະນຸດຈົ່ງຢູ່ເປັນກ້ອນເປັນກຸ່ມ, ເປັນກຸ່ມຊົນ ແລະພ້ອມພຽງກັນເຮັດການກະສິກຳ (ລ່າສັດ, ຫາປາ, ປຸງແຕ່ງອາຫານການກິນ). ຄຽງຄູ່ກັບກຳມະສິດຂອງກຸ່ມຊົນກ່ຽວກັບພາຫະນະການຜະລິດແລ້ວ ກໍຍັງມີ ກຳມະສິດສ່ວນຕົວຂອງບັນດາສະມາຊິກກຸ່ມຊົນກ່ຽວກັບເຄື່ອງມືແຮງງານ ຈຳນວນຫນຶ່ງ ຊຶ່ງຖືເປັນທັງອາວຸດປ້ອງກັນຈາກບັນດາສັດຮ້າຍຕ່າງໆນຳອີກ.

ຢູ່ໃນສັງຄົມປະຖົມບູຮານ ຜົນຜະລິດຍັງມີຫນ້ອຍ ແລະ ກໍບໍ່ມີການ ຜະລິດເກີນປະລິມານອັນຈຳເປັນແກ່ການດຳລົງຊີວິດແຕ່ຢ່າງໃດ. ການອອກແຮງງານກໍອີງຕາມການຮ່ວມງານກັນແບບງ່າຍດາຍ ຫມາຍຄວາມວ່າຫລາຍໆ ຄົນພ້ອມກັນສຸມໃສ່ເຮັດວຽກງານໃດຫນຶ່ງນຳກັນໂລດ. ໃນທີ່ນີ້ບໍ່ມີການກົດຂີ່ຂຸດຮີດຄົນຕໍ່ຄົນມີແຕ່ການແບ່ງປັນອາຫານການກິນລະຫວ່າງບັນດາສະມາຊິກ ກຸ່ມຊົນດ້ວຍກັນຢ່າງເທົ່າທຽມກັນ.

ໃນຂະນະທີ່ຢູ່ໃນໄລຍະເວລາແຫ່ງການຜັນແຍກມະນຸດອອກຈາກ ສັດໂລດນັ້ນ ມະນຸດໄດ້ອາໄສຢູ່ຮ່ວມກັນເປັນຫມວດເປັນຫມູ່. ໃນເວລາຕໍ່ມາເນື່ອງຈາກການກະສິກຳໄດ້ກຳເນີດເກີດຂຶ້ນ ການຈັດຕັ້ງຊາດພັນສັງຄົມກໍຄ່ອຍໆມີຂຶ້ນເປັນລຳດັບຄືຫມາຍຄວາມວ່າ ທຸກຄົນທີ່ຢູ່ຮ່ວມກັນຕາມສາຍພົວພັນຊາດພັນ ນັ້ນໄດ້ຮ່ວມກັນເຂົ້າເພື່ອເຮັດວຽກຮ່ວມກັນ. ເບື້ອງຕົ້ນຈຳນວນພົນຊາດພັນ ກໍມີພຽງແຕ່ນັບເປັນສິບໆຄົນເທົ່ານັ້ນ ແຕ່ພາຍຫລັງມາຈຳນວນພົນດັ່ງກ່າວກໍຖີບສູງຂຶ້ນນັບເປັນຮ້ອຍໆຄົນ. ໃນຂະບວນວິວັດຂອງເຄື່ອງມືແຮງງານ ພາຍໃນຊາດພັນກໍເກີດມີການແບ່ງປັນວຽກງານຕາມເພດ ແລະ ໄວກະສຽນຂຶ້ນ:ລະຫວ່າງຜູ້ຊາຍ ແລະ ແມ່ຍິງ, ລະຫວ່າງຜູ້ໃຫຍ່, ເດັກນ້ອຍ ແລະ ຜູ້ເຖົ້າ. ຢູ່ໃນໄລຍະນີ້ ການແບ່ງປັນວຽກງານ ແມ່ນມີຜົນດີໃຫ້ແກ່ການຍົກສູງລະດັບການຜະລິດຂອງສັງຄົມມະນຸດແລ້ວ.

ໃນຂັ້ນຕົ້ນຂອງລະບອບຊາດພັນນີ້ ບົດບາດນຳຫນ້າແມ່ນຂຶ້ນກັບແມ່ຍິງ.

ແມ່ຍິງເປັນຜູ້ຊອກຫາອາຫານພືດພັນ ແລະ ເບິ່ງແຍງວຽກບ້ານການເຮືອນ. ນັ້ນແມ່ນຊາດພັນມານຸດາ ຫລື <u>ມານດາສິດທິລາດ</u>. ຜູ້ຊາຍເຮັດວຽກ ລ່າສັດ ແລະ ຫາປາເປັນສ່ວນໃຫຍ່. ຕໍ່ມາໃນເມື່ອການລ້ຽງສັດ ແລະ . ການປູກຝັງ ໄດ້ຕົກເປັນ ພາລະກິດຂອງຜູ້ຊາຍແລ້ວ ມານດາສິດທິລາດ ກໍຖືກປ່ຽນມາເປັນ ປິດາສິດທິລາດ. ປົດບາດນຳໜ້າພາຍໃນຊາດພັນຈຶ່ງກາຍມາເປັນຂອງຜູ້ຊາຍ.

ຜ່ານການລ້ຽງສັດ ແລະ ການປູກຝັງນັ້ນກໍໄດ້ເກີດມີ <u>ການແບ່ງປັນແຮງງານສັງຄົມ</u>ຂຶ້ນ ໝາຍຄວາມວ່າ ພາກສ່ວນໜຶ່ງຂອງສັງຄົມ ແມ່ນຮັບໜ້າທີ່ ເຮັດການປູກຝັງເປັນຕົ້ນຕໍອີກສ່ວນໜຶ່ງແມ່ນຮັບໜ້າທີ່ລ້ຽງສັດ. ການແຍກຕົວ ການລ້ຽງສັດອອກຈາກການປູກຝັງແມ່ນ <u>ການແບ່ງປັນແຮງງານສັງຄົມຄັ້ງໃຫຍ່ ເທື່ອທຳອິດໃນປະຫວັດສາດ.</u>

ການແບ່ງປັນແຮງງານສັງຄົມເທື່ອທຳອິດນີ້ ໄດ້ເຮັດໃຫ້ແຮງງານ ມະນຸດປະສົບກັບຜົນຜະລິດສູງຂຶ້ນ. ຢູ່ຕາມບັນດາກຸ່ມຊົນຕ່າງໆກໍໄດ້ເກີດມີ ຜົນຜະລິດສ່ວນເກີນຈຳນວນໜຶ່ງ ແລະ ມີຄວາມຮຽກຮ້ອງຕ້ອງການເອົາຜົນ ຜະລິດປະເພດອື່ນຂຶ້ນຕື່ມອີກ. ສິ່ງດັ່ງກ່າວນີ້ ມັນໄດ້ສ້າງເງື່ອນໄຂ ໃຫ້ແກ່ການແລກປ່ຽນກັນລະຫວ່າງຊາວລ້ຽງສັດ ແລະ ຊາວໄຮ່ນາ. ໃນຊ່ວໄລຍະຕໍ່ມາມະນຸດໄດ້ຮູ້ຈັກຕົ້ມຫລອມໂລຫະຄືທອງແດງ ແລະ ກົ່ວ (ສ່ວນເຫລັກນັ້ນມະນຸດ ຮູ້ຈັກປະດິດສ້າງໃນພາຍຫລັງ), ຮູ້ຈັກຜະລິດເຄື່ອງມື, ອາວຸດ ແລະ ເຄື່ອງ ຮັບໃຊ້ໃນຄອບຄົວທີ່ເຮັດດ້ວຍທອງສຳລິດ. ການປະດິດສ້າງ ກໍ່ຕຳ່ຫູກ ກໍ່ອຳ ນວຍຄວາມສະດວກຢ່າງຫລວງຫລາຍໃນການຜະລິດແຜ່ນແພ ແລະ ເຄື່ອງນຸ່ງ ຫົ່ມ. ຢູ່ຕາມ ກຸ່ມຊົນຕ່າງໆກໍເກີດມີພວກເຮັດການຫັດຖະກຳຂຶ້ນເປັນ ລຳດັບ ແລະ ຜະລິດຕະພັນຂອງເຂົາເຈົ້າກໍນຳໄປສູ່ການແລກປ່ຽນເລື້ອຍໆມາ.

ການຂະຫຍາຍຕົວຂອງກຳລັງການຜະລິດກໍໄດ້ຍົກສະມັດຖະພາບ ແຮງ ງານມະນຸດໃຫ້ສູງຂຶ້ນຢ່າງໃຫຍ່ຫລວງ ແລະ ເປັນເຈົ້າການຕໍ່ໄພທຳມະຊາດ, ຮັບປະກັນວັດຖຸອຸມໃຊ້ຕ່າງໆ. ແຕ່ວ່າກຳລັງການຜະລິດອັນໃໝ່ຂອງສັງຄົມດັ່ງ ກ່າວນັ້ນ ບໍ່ທັນສອດຄ່ອງກັບການພົວພັນແຫ່ງການຜະລິດທີ່ມີຢູ່ແລ້ວນັ້ນເທື່ອ. ວົງ ແຄບຂອງກຳມະສິດສ່ວນລວມຂອງກຸ່ມຊົນ, ການແບ່ງປັນ ຜົນຜະລິດແຮງງານ ແບບເທົ່າທຽມກັນໄດ້ກາຍເປັນສິ່ງກີດຂວາງຕໍ່ການສືບຕໍ່ຂະຫຍາຍຕົວ ຂອງ ກຳລັງການຜະລິດ. ຄວາມຈຳເປັນໃນການອອກແຮງງານລວມກໍສູນຫາຍ ໄປ

ແລະ ຄວາມສາມາດ ແລະ ຄວາມຈຳເປັນໃນການອອກແຮງງານເອກະເທດ ກໍເກີດມີຂຶ້ນ. ການອອກແຮງງານລວມຫມູ່ຮຽກຮ້ອງໃຫ້ມີກຳມະສິດສ່ວນ ລວມ ກ່ຽວກັບອຸປະກອນການຜະລິດສ່ວນວ່າແຮງງານເອກະເທດ ກໍພັດຮຽກຮ້ອງໃຫ້ມີກຳມະສິດສ່ວນຕົວ. ກຳມະສິດສ່ວນຕົວກ່ຽວກັບພາຫະນະການຜະລິດຈຶ່ງ ປະກົດເກີດຂຶ້ນ ແລະ ພ້ອມດຽວກັນນັ້ນ ຄວາມບໍ່ສະເຫມີພາບ ດ້ານວັດຖຸ ລະຫວ່າງຄົນຕໍ່ຄົນ, ລະຫວ່າງຊາດພັນກໍຄືພາຍໃນຊາດພັນເອງ ກໍເກີດມີຂຶ້ນ.ໃນ ເມື່ອນັ້ນກໍເກີດມີຄົນຮັ່ງ ແລະ ຄົນທຸກ.

ໃນຂະນະທີ່ກຳລັງການຜະລິດເຕີບໃຫຍ່ຂະຫຍາຍຕົວ ມະນຸດໄດ້ມີວັດຖຸ ຊົມໃຊ້ຫຼາຍເກີນກວ່າຄວາມຈຳເປັນຂອງການດຳລົງຊີວິດຂອງຕົນອີກຊຳ້.ຢູ່ໃນ ເງື່ອນໄຂດັ່ງກ່າວນີ້ ໄດ້ມີຄວາມສາມາດໃນການໃຊ້ຄົນງານຫລາຍຂຶ້ນຕື່ມ.ຄົນ ງານເຫລົ່ານີ້ຖືກຈັບໄດ້ປາງສົງຄາມ: ຊະເລີຍເສິກຖືວ່າເປັນພວກຂ້າທາດທັງ ຫມົດ. ໃນເບື້ອງຕົ້ນການເປັນຂ້າທາດແມ່ນມີລັກສະນະບິດາສິດທິລາດ (ຮັບ ໃຊ້ຄອບຄົວ) ແຕ່ພາຍລຸນມາໄດ້ກາຍເປັນພື້ນຖານຕົ້ນຕໍໃຫ້ແກ່ການດຳລົງຄົງ ຕົວຂອງລະບອບໃຫມ່. ການນຳໃຊ້ແຮງງານຂ້າທາດ ຍິ່ງເຮັດໃຫ້ຄວາມບໍ່ສະ ເຫມີພາບເຕີບໃຫຍ່ຂະຫຍາຍຕົວຂຶ້ນຊັກໄຊ້: ບຸກຄົນທີ່ນຳໃຊ້ແຮງງານພວກຂ້າ ທາດນັ້ນ ກໍອຸດົມຮັ່ງມີຂຶ້ນຢ່າງວ່ອງໄວ. ໃນໄລຍະຕໍ່ມາພວກຮັ່ງມີທັງຫລາຍ ບໍ່ ພຽງແຕ່ເອົາພວກຊະເລີຍເສິກມາເປັນຂ້າທາດເທົ່ານັ້ນ ແຕ່ຍັງເອົາພວກເຜົ່າ ຊົນທີ່ທຸກຍາກ ແລະ ລູກຫນີ້ຂອງຕົນຕື່ມອີກ ຊຶ່ງເຮັດໃຫ້ທະວີຄູນຄວາມ ບໍ່ສະ ເຫມີພາບຍິ່ງຂຶ້ນ. ນີ້ຄືການກຳເນີດການແບ່ງແຍກສັງຄົມເປັນຊົນຊັ້ນເທື່ອທຳ ອິດຄືເປັນຊົນຊັ້ນເຈົ້າທາດ ແລະ ຂ້າທາດ. ເກີດມີການກົດຂີ່ຂູດຮີດຄົນ ຕໍ່ຄົນ. ເລີ່ມແຕ່ໄລຍະນັ້ນເປັນຕົ້ນມາ ຕະຫລອດປະຫວັດສາດຂອງສັງຄົມມະນຸດຈົນມາ ຮອດໄລຍະການກໍ່ສ້າງລະບອບສັງຄົມນິຍົມ ແມ່ນປະຫວັດສາດແຫ່ງການຕໍ່ສູ້ຊົນ ຊັ້ນເລື້ອຍມາ.

ການເຕີບໃຫຍ່ຂະຫຍາຍຕົວຂອງຄວາມບໍ່ສະເຫມີພາບລະຫວ່າງມະນຸດ ດ້ວຍກັນກໍ້ກ້າວໄປເຖິງການສ້າງຕັ້ງລັດ ຊຶ່ງເປັນພາຫະນະຂອງຊົນຊັ້ນ ເຈົ້າ ທາດທັງຫລາຍ ເພື່ອກົດຂີ່ຂົ່ມເຫັງພວກຂ້າທາດ. ດັ່ງນັ້ນ ແບບວິທີການຜະລິດ ສະໄຫມປະຖົມບູຮານຈຶ່ງໄດ້ສິ້ນສຸດລົງ. ລະບອບສັງຄົມຂ້າທາດໄດ້ເກີດຂຶ້ນ - ເປັນໄລຍະທີສອງຂອງສັງຄົມມະນຸດ.

๖. ແບບວິທີການຜະລິດສະໄຫມຂ້າທາດ

ລະບອບຂ້າທາດ ແມ່ນຮູບການຂູດຮີດເທື່ອທຳອິດທີ່ຢ່າເຖື່ອນທີ່ສຸດ ໃນປະຫວັດສາດຂອງມະນຸດ. ເກືອບທຸກໆຊົນຊາດໃນໂລກຖືວ່າໄດ້ຜ່ານຂ້ານ ລະບອບຂ້າທາດມາແລ້ວ.

ລະບອບຂ້າທາດຢູ່ປະເທດ ເອຢິບ, ອິນເດຍ ແລະ ຈີນດຳລົງຄົງຕົວ ຢູ່ເມື່ອ ๔ - ๖ ພັນປີກ່ອນ ຄຣິດຕະສັກກະລາດ. ຢູ່ປະເທດກະເຣັກ ລະບອບຂ້າທາດໄດ້ຂະຫຍາຍຕົວຢ່າງກວ້າງຂວາງ ເມື່ອສະຕະວັດ ທີ ๕ - ๔ ກ່ອນຄຣິດຕະສັກກະລາດ. ລະບອບຂ້າທາດທີ່ເຕີບໃຫຍ່ຂະຫຍາຍຕົວ-ໃນລະດັບສູງກວ່າຫມູ່ຫມົດແມ່ນຢູ່ກຸງໂຣມໃນໄລຍະແຕ່ສະຕະວັດທີ ๖ ກ່ອນ ຄຣິດຕະສັກກະລາດ ຮອດສະຕະວັດທີ ๖ ຂອງຄຣິດຕະສັກກະລາດ.

ພື້ນຖານຂອງການຂ້ານຜ່ານຈາກສັງຄົມປະຖົມບູຮານໄປຫາລະບອບສັງຄົມຂ້າທາດ ແມ່ນການເຕີບໃຫຍ່ຂະຫຍາຍຕົວຂອງກຳລັງການຜະລິດ, ການ ຂະຫຍາຍຕົວໃນການແບ່ງປັນແຮງງານ ແລະ ການແລກປ່ຽນຂອງສັງຄົມ.

ໃນສະໄຫມນັ້ນ ກຳລັງການຜະລິດແມ່ນມີລັກສະນະໃດ ? ດັ່ງທີ່ຮູ້ ນຳ ກັນແລ້ວວ່າ ໃນຍຸກສະໄຫມສັງຄົມປະຖົມບູຮານເຄື່ອງມືແຮງງານແມ່ນເຮັດ - ດ້ວຍຫີນເປັນ ສ່ວນໃຫຍ່ ເມື່ອຕົກມາຮອດລະບອບສັງຄົມຂ້າທາດ ຍ້ອນຮູ້ຈັກຫຼໍ່ ຫລອມເຫລັກມະນຸດກໍເລີ່ມເຮັດເຄື່ອງມືດ້ວຍເຫລັກ. ເຄື່ອງມືທີ່ເຮັດດ້ວຍ ໂລ ຫະໄດ້ອຳນວຍຄວາມສະດວກໃຫ້ແກ່ການຂະຫຍາຍວົງກວ້າງຂອງແຮງງານມະ ນຸດ. ໂດຍອາໄສຂວານເຫລັກມະນຸດກໍສາມາດຖາກຖາງບຸກເບີກທີ່ດິນ, ຊາວ ໄຮ່ນາກໍສາມາດສັບສ່າວດິນນາ; ຄັນໄຖກໍປະກອບດ້ວຍຫມາກສົບໄຖເຫລັກຊຶ່ງ ເປັນເງື່ອນໄຂສະດວກໃຫ້ແກ່ການບຸກເບີກດິນນາອອກຢ່າງກວ້າງຂວາງ.ການ ປູກຝັງ ກໍບໍ່ພຽງແຕ່ຜະລິດເຂົ້າ ແລະ ພືດພັນເທົ່ານັ້ນ ແຕ່ກໍຍັງມີເຫລົ້າ ແວງ ແລະ ນຳ້ມັນພືດອີກ. ການປະດິດສ້າງເຄື່ອງມືດ້ວຍໂລຫະ ເຮັດໃຫ້ເກີດມີກຸ່ມ ຄົນຂຶ້ນອີກກຸ່ມຫນຶ່ງຄືຊາວຫັດຖະກຳ. ວຽກງານຂອງ ຄົນກຸ່ມນີ້ ກໍມີລັກສະນະ ເປັນເອກະລາດຂຶ້ນເລື້ອຍໆ. ນີ້ຄືການກຳເນີດ <u>ການແບ່ງປັນແຮງງານສັງຄົມ ຄັ້ງໃຫຍ່ເທື່ອທີສອງ</u>-<u>ການຫັດຖະກຳຜັນແຍກອອກຈາກການປູກຝັງ</u>.

ໂດຍການຜັນແຍກການຫັດຖະກຳອອກຈາກການປູກຝັງນັ້ນ ການແລກ

ປ່ຽນກໍຍິ່ງມີການຂະຫຍາຍຕົວອອກຕື່ມອີກ. ເມື່ອການແລກປ່ຽນມີການຂະ-ຫຍາຍຕົວອອກຢ່າງກວ້າງຂວາງເຊັ່ນນັ້ນ ກໍເກີດມີເງິນຊຶ່ງເປັນດັ່ງສິນຄ້າ ທີ່ມີຄຸນລັກສະນະທົ່ວໄປ. ໂດຍອາໄສເງິນ ເພີ່ນຈຶ່ງໄດ້ກຳນົດລາຄາສິນຄ້າຕ່າງໆ ແລະ ເງິນຖືກຖືເປັນສື່ກາງໃນການແລກປ່ຽນກັນ. ຍ້ອນຄວາມເຕີບໃຫຍ່ ຂະ ຫຍາຍຕົວດ້ານການແບ່ງປັນແຮງງານ ແລະ ການແລກປ່ຽນນັ້ນເອງ ຈຶ່ງປະ-ກົດມີຜູ້ຊື້ ແລະ ຜູ້ຂາຍສິນຄ້າຂຶ້ນ. ນັ້ຄືການກຳເນີດ <u>ການແບ່ງປັນແຮງງານ-ສັງຄົມຄັ້ງໃຫຍ່ເທື່ອທີສາມ-ຄື ການແບ່ງແຍກອອກເປັນຊາວຄ້າຂາຍ.</u> ໂດຍ ສວຍໃຊ້ບັນດາຜູ້ຜະລິດນ້ອຍທີ່ຢູ່ຫ່າງໄກຈາກທ້ອງຕະຫລາດນັ້ນຊາວຄ້າຂາຍໄດ ເກັບຊື້ສິນຄ້າຕ່າງໆນຳພວກເຂົາເຈົ້າດ້ວຍລາຄາຕຳ່ ແລະ ນຳໄປຈຳຫນ່າຍ ໃນທ້ອງຕະຫລາດດ້ວຍລາຄາທີ່ສູງກວ່າ.

ການຂະຫຍາຍຕົວດ້ານການຫັດຖະກຳ ແລະ ແລກປ່ຽນໄດ້ນຳໄປ ສູ່ ການສ້າງຕັ້ງບັນດາຕົວເມືອງຕ່າງໆຂຶ້ນ. ໃນເບື້ອງຕົ້ນຕົວເມືອງກໍແຕກ ຕ່າງ ຈາກຊົນນະບົດພຽງເລັກນ້ອຍເທົ່ານັ້ນ ແຕ່ວ່າການຫັດຖະກຳ ແລະ ການ ຄ້າ ເລີ່ມເຕົ້າໂຮມກັນເປັນລຳດັບມາ ຢູ່ພາຍໃນບັນດາຕົວເມືອງຕ່າງໆ. ນັ້ຄື ຈຸດ ເລີ່ມຕົ້ນຂອງການຜັນແຍກຕົວເມືອງອອກຈາກຊົນນະບົດ.

ການຂະຫຍາຍຕົວຂອງກຳລັງການຜະລິດ, ການສືບຕໍ່ແບ່ງປັນ ແຮງ ງານສັງຄົມ ແລະ ການແລກປ່ຽນຍິ່ງເພີ່ມທະວີ ຄວາມບໍ່ສະເຫມີພາບກັນ ຂຶ້ນ ຢ່າງຮ້າຍແຮງ. ດ້ານຫນຶ່ງ ພວກຮັ່ງມີກໍເກີດຂຶ້ນ ແລະ ທ້ອນໂຮມເອົາ ສັດ ລາກແກ່, ເຄື່ອງມືແຮງງານ, ເງິນເປັນກຳມະສິດຂອງຕົນ; ສ່ວນອີກ ດ້ານ ຫນຶ່ງ ແມ່ນພວກທຸກຍາກທັງຫລາຍຊຶ່ງໄດ້ຮັບຄວາມທຸກຍາກຂັດສົນຈຶ່ງ ຈຳເປັນ ຕ້ອງຂໍເພິ່ງກູ້ຢືມນຳພວກຮັ່ງມີ. ເກີດມີການກູ້ຢືມ, ເຈົ້າຫນີ້ແລະລູກຫນີ້ຂຶ້ນ . "...ຢູ່ໃນໂລກສະໄຫມບຸຮານນັ້ນ ການຕໍ່ສູ້ຊົນຊັ້ນໄດ້ດຳເນີນໄປຢ່າງ ຮ້າຍ ແຮງໃນຮູບການຕໍ່ສູ້ລະຫວ່າງເຈົ້າຫນີ້ ແລະ ລູກຫນີ້ ແລະ ຢູ່ທີ່ກຸງໂຮມລູກຫນີ້ ຊັ້ນຕຳ່ທີ່ພົບກັບຄວາມຫລົ້ມຈົມຈຶ່ງທົດແທນດ້ວຍການເປັນຂ້າທາດ"[1]. ພວກ ເຈົ້າທາດຮັ່ງມີທັງຫລາຍຕ່າງກໍມີຂ້າທາດນັບຮ້ອຍນັບພັນຄົນ. ພວກເຂົາ ເຈົ້າ ເຫລົ່ານີ້ໄດ້ຍຶດເອົາດິນດອນຕ່ອນຫຍ້າຢ່າງກວ້າງໃຫຍ່ໄພສານ ແລະດ້ວຍເຫດ

---

1) ກ.ມາກ ແລະ ຟ.ອັງແກນ. ບົດນິພົນ, ເຫລັ້ມ ໄມ, ຫນ້າ ຈ້ຄ.

ນ້ັ ເອງ ຈ່ົງເກ ິດມ ີຊ ຸ ບ ສ ິ ນ ທ ີ ດ ິ ນ ຂ ້ າ ທ າ ດ ຂ ະ ຫ ນ າ ດ ໃ ຫ ຍ ່ ປ ະ ກ ິ ດ ນ ້ ັ ນ . (ຢ ູ ່ ກ ຸ ງ ໂ ຣ ມ ສ ະ ໄ ໝ ມ ູ ຣ ານ ເ ພ ີ ນ ເ ອ ີ ນ ວ ່ າ ລ າ ຕ ິ ຝ ນ ດ ຍ). ຢ ູ ່ ໃ ນ ຂ ອ ດ ທ ີ ດ ິ ນ ດ ັ ່ ງ ກ ່ າ ວ ນ ີ ້ ໄ ດ ນ ໍ າ ໃ ຊ ້ ແ ຮ ງ ງ ານ ພ ວ ກ ຂ ້ າ ທ າ ດ ເ ປ ັ ນ ຈ ໍ ານ ວ ນ ມ ະ ຫ າ ສ ານ .

ການ ພ ົ ວ ພ ັ ນ ແ ຫ ່ ງ ການ ຜ ະ ລ ິ ດ ຂ ອ ງ ລ ະ ບ ອ ບ ສ ັ ກ ດ ິ ນ ້ ໍ າ ທ າ ດ ແ ມ ່ ນ ເ ຈ ົ ້ າ ທ າ ດ ເ ປ ັ ນ ເ ຈ ົ ້ າ ຂ ອ ງ ຕ ໍ ່ ພ າ ທ ະ ນ ะ ການ ຜ ะ ລ ິ ດ (ທ ີ ດ ິ ນ , ເ ຄ ື ່ ອ ງ ມ ื ແ ຮ ງ ງ ານ ແ ລ ะ ອ ื ่ ນ ๆ) ແ ລ ะ ຕ ั ด ສ ิ ນ ໃ ຈ ໃ ນ ການ ຜ ะ ລ ิ ດ ນ ั ้ น ค ื ພ ວ ກ ຂ ้ າ ທ າ ດ . ຂ ้ າ ທ າ ດ ຜ ู ້ ຫ ນ ึ ่ ง ຖ ื ວ ่ າ ເ ປ ັ ນ ຄ ื ວ ั ດ ຖ ุ ສ ิ ่ ง ຂ ອ ง ส ามั ญ ท ี ่ ว ไ ป ແ ລ ะ ຢ ู ่ ໃ ນ ฐ ามะ ข ้ อ ย ข ้ า ร ับ ใ ช ้ เ จ ้ า ท าด โ ด ย ส ั ม ค ื ใ จ . ໃ ນ ສ າ ຍ ຕ າ ຂ ອ ง ส ั ง ค ม ข ้ า ท าด แ ต ก ต ่ า ง จ า ก ข อ ว า ม ห ล ั ก ห ล ี ก เ ล ี ย ง ย ว ด ย ว ง แ ต ่ ว ่ า ข ้ า ท าด ส า ม า ด ป า ก เ ว ้ า ไ ด ้ เ ท ่ า น ั ้ น . ນ ອ ກ ຈ າ ກ ນ ี ้ ແ ລ ้ ວ ข ้ า ท าด บ ่ แ ต ก ต ่ า ง ห ย ั ง ก ั บ ช ุ ม ช น อ ื ่ น ๆ ข อ ง เ จ ้ า ท าด ค ื ก ั น ก ั บ ว ิ ถ ี ช ี ว ิ ต ป ร ะ จ ำ ว ั น , ร ี ต ອ ม , ท ี ด ิ น ห ร ื อ เ ค ื ่ อ ง ม ื อ ท ำ ก ิ น ท ั ่ ว ไ ป .

ການ ก ิ ด ข ึ ้ น ร ั ก ษ า ร ะ ห ว ่ า ง ข ้ า ท าด ก ั บ ช ุ ม ช น ใ ห ญ ่ ท ี ่ ส ุ ด . ພ ວ ກ ข ้ า ท าด ถ ื ก ป ฏ ิ บ ั ต ิ ด ้ ว ย ค ว า ม ร ั ง เ ก ี ย จ ย ิ ่ ง ก ว ่ า ว ิ ถ ี ช ี ว ิ ต ป ก ต ิ ข อ ง ช า ว บ ้ า น ท ั ่ ว ไ ป . ພ ວ ก ເ ข ้ า ถ ื ก ไ ล ่ ป ้ อ ง ไ ป ส ู ่ ห ม ู ่ บ ้ า น ร ก ร ้ า ง ว ่ า ง เ ป ล ่ า ห ร ื อ ป ่ า ช ้ า . ຖ ้ า ธ ั ด ห ย ั ง ผ ิ ด พ ล ั ้ ง ล ั ก ม อ ย ก ็ ถ ื ก ข ู ่ เ ข ็ ญ ต ี ล ั ง โ ท ษ อ ย ่ า ง ห น ั ก ແ ล ะ ບ า ง ค ั ้ ง ก ็ ถ ื ก ข ่ า ต ั ด ค อ . ເ จ ้ า ท าด บ ่ ร ับ ผ ิ ด ช อ บ ต ่ อ ก า ร ข ่ า ต ี พ ว ก ข ้ า ท าด แ ต ่ อ ย ่ า ง ใ ด . ເ จ ้ า ท าด ไ ด ้ ม อ บ ใ ห ้ ก ั บ เ จ ้ า ห ม ด ท ุ ก ผ ื น ผ ะ ล ิ ด จ า ก แ ร ง ง า น ข ้ า ท าด . ข ้ า ท าด ไ ด ้ ร ับ อ ั ต ร า ส ่ ว น ข ้ า ว เ ป ล ื อ ก เ พ ื ่ อ ส า ม า ด ร ั ก ษ า ก ำ ล ั ง แ ร ง ง า น ใ ห ้ แ ก ่ เ จ ้ า ท าด ต ่ อ ไ ป ก ็ พ ย ุ ง แ ต ่ บ ั ง ค ั บ ใ ห ้ ต า ย จ า ก ค ว า ม อ ด ห ิ ว เ ท ่ า น ั ้ น .

ນ ิ ย ม ช ั ้ น ฐ า ม ก า ร เ ต ้ า โ ฮ ม แ ร ง ง า น ล อ ม ห ม ู ่ ข อ ง ข ้ า ท าด แ บ บ ง ่ า ย ด า ย น ั ้ น ໂ ລ ก ส ะ ໄ ห ม ม ู ร า ม ไ ด ้ ร ับ ค ว า ม ก ว ้ า ง ห ม ่ า ย ท ี ่ ห ล ว ง ห ล า ย ท า ง ด ้ า น ส ต ิ ป ั ญ ญ า ท า ง ด ้ า น อ ั ด ท ะ น ะ ท ำ . ผ ่ า น พ ั ้ น ฐ า ย เ ช ื ้ อ ข อ ง ข ้ า ท าด ม า ก ็ ไ ด ้ เ ก ิ ด ม ี อ ั ด ท ะ น ะ ท ำ ม ู ร า ม ข ึ ้ น . ວ ิ ช า ค ว า ม ร ู ้ ห ล า ย ข ะ แ ข น ง (ว ิ ช า ค ะ ณ ิ ต ศ า ส ต ร ์ , ด า ร า ศ า ส ต ร ์ , ก ิ ม จ ั ก , ส ะ ถ า ป ั ต ย ะ ย ะ ก ำ) ไ ด ้ ร ับ ว ิ ว ั ฒ ะ - น า ก า ร อ ย ่ า ง ก ว ้ า ง ข ว า ง . ເ ຖ ิ ง ว ่ า ม ี พ ื ้ น ก ว ้ า ง ห ม า ต ่ า ง ๆ ก ็ ย ่ อ ม ร ับ ใ ส ่ ล ะ ม อ บ ป ะ ถ ิ ม ม ู ร า ม ก ็ ต า ม , ใ น เ ว ล า ต ่ อ ม า แ บ บ ว ิ ธ ี ก า ร ผ ะ ล ิ ด ส ะ ໄ ห ม ข ้ า ท าด ไ ด ้ ก ล า ย เ ป ็ น อ ุ ป ะ ส ั ก ก ิ ด ข ว า ง ก า ร ข ะ ย า ย ต ั ว ข อ ง ส ั ง ค ม ม ะ ม ุ ด .

ແ บ บ ว ิ ธ ี ก า ร ผ ะ ล ิ ด ส ะ ໄ ห ม ข ้ า ท าด ไ ด ้ ช ่ ว ย ข อ ม ค ว า ม ข ั ด แ ย ้ ง อ ั น

ຫນັກຫນ່ວງໄວ້ພາຍໃນຕົວອັນນັ້ນຄື ຕົ້ນເຫດແຫ່ງການກ້າວເຂົ້າສູ່ການ ອະວະ ສານຂອງມັນເອງ. ກ່ອນອື່ນຫມົດ ຮູບການຂູດຮີດສະໄຫມຂ້າທາດໄດ້ທຳລາຍ ກຳລັງການຜະລິດພື້ນຖານຂອງສັງຄົມ-ຄືຂ້າທາດ. ຍ້ອນເຫດນີ້ ພວກຂ້າທາດ ຈຶ່ງໄດ້ພ້ອມກັນລຸກຮື້ຂຶ້ນຕ້ານທຸກຮູບການຂູດຮີດອັນປ່າເຖື່ອນນັ້ນຢ່າງລຽນຕິດ . ພື້ນຖານເສດຖະກິດຂ້າທາດ ແມ່ນປະກອບດ້ວຍພວກຂ້າທາດທີ່ຈັບໄດ້ຈາກ ລັດ ອື່ນໃນປາງສົງຄາມນັ້ນເອງ. ກຳລັງແຮງຕົ້ນຕໍໃນການດຳເນີນສົງຄາມກໍແມ່ນ ຊາວໄຮ່ນາ ແລະ ນາຍຊ່າງຫັດຖະກຳ. ພວກເຂົາເຈົ້າຮັບໃຊ້ເປັນ ທະຫານ ແລະ ທັງແບກຫາບພາລະຢ່າງຫນັກຫນ່ວງຕໍ່ການເກັບເກນເສຍຊ່ວຍ ເພື່ອດຳ ເນີນສົງຄາມ. ຈາກຜົນການແຂ່ງຂັນຂອງການຜະລິດຂະຫນາດໃຫຍ່ ທີ່ອີງໃສ່ ຄ່າແຮງງານຕຳ່ຂອງຂ້າທາດນັ້ນ ເສດຖະກິດຂອງຊາວໄຮ່ນາ ແລະນາຍຊ່າງ ຫັດຖະກຳກໍຫລົ້ມຈົມພັງທະລາຍລົງ. ສິ່ງດັ່ງກ່າວນີ້ໄດ້ທຳລາຍຄວາມເຂັ້ມແຂງ ທາງດ້ານເສດຖະກິດ, ການເມືອງ, ການທະຫານຂອງບັນດາລັດຂ້າທາດທັງ ຫລາຍ. ໄຊຊະນະກໍຜັນປ່ຽນມາເປັນການປະລາໄຊ ແລະ ແຫລ່ງຂອງ ແຮງ ງານຂ້າທາດກໍສິ້ນສຸດລົງ. ດ້ວຍເຫດນີ້ມັນຈຶ່ງກ້າວໄປເຖິງບ່ອນການຜະລິດ ກໍ ເຊື່ອມໂຊມຕົກຕຳ່ລົງໂດຍທົ່ວໄປ.

" ຄວາມທຸກຍາກຂັດສົນຢ່າງຮອບດ້ານ, ການຕົກຕຳ່ດ້ານການຄ້າ , ດ້ານຫັດຖະກຳ ແລະ ສິລະປະ, ຈຳນວນປະຊາກອນຫລຸດນ້ອຍຖອຍລົງ,ການ ປະລະບັນດາຕົວເມືອງ, ການປູກຝັງຕົກສູ່ລະດັບຕຳ່ທັງຫມົດນີ້ຄືຈຸດ ອະວະ ສານແຫ່ງການຄອບຄອງໂລກສະໄຫມໂຮມ.[1]

ໃນເບື້ອງຕົ້ນ ແບບວິທີການຜະລິດສະໄຫມຂ້າທາດເປັນຜົນດີ ໃຫ້ ແກ່ ການຂະຫຍາຍຕົວຂອງມັນພັດໄດ້ທຳລາຍມ້າງເພກຳລັງການຜະລິດ.ດ້ວຍເຫດ ນີ້ການພົວພັນແຫ່ງການຜະລິດຊຶ່ງນອນຢູ່ບົນແຮງງານຂ້າທາດນັ້ນ ຈຶ່ງຕ່າວ ປົ້ນ ເປັນສິ່ງກີດຂວາງແກ່ການຂະຫຍາຍຕົວຂອງກຳລັງການຜະລິດຂອງສັງຄົມ ທັງ ຫມົດ. ການອອກແຮງງານຂອງພວກຂ້າທາດຜູ້ທີ່ຫມົດຄວາມອາໄລໄຍດີ ຕໍ່ ຫມາກຜົນການຜະລິດນັ້ນກໍຈົບສິ້ນລົງ. ເມື່ອນັ້ນກໍເກີດມີຄວາມຈຳເປັນທາງປະ ຫວັດສາດໃນການສັບປ່ຽນບັນດາການພົວພັນແຫ່ງການຜະລິດສະໄຫມຂ້າ ທາດ

---

1) ກ.ມາກ ແລະ ຟ.ອັງແກນ.ບົດນິພົນ, ເຫລັ້ມ ๘๑, ຫນ້າ ๑๔๗.

ດ້ວຍການພົວພັນການຜະລິດຢ່າງອື່ນທີ່ພໍຈະປ່ຽນສະພາບກຳລັງຜະລິດຕົ້ນຕໍຂອງ ສັງຄົມຄືຂ້າທາດໄດ້.

ເນື່ອງຈາກເສດຖະກິດຂະຫນາດໃຫຍ່ຊຶ່ງນອນຢູ່ບົນແຮງງານຂ້າທາດ-ຖືກຊຸດໂຊມລົງ ເສດຖະກິດຂະຫນາດນ້ອຍຈຶ່ງບັງເກີດຜົນເປັນຢ່າງດີ. ຍ້ອນ ເຫດນີ້ຈຳນວນຂ້າທາດທີ່ຖືກປົດປ່ອຍກໍເພີ່ມທະວີຂຶ້ນ ແລະ ໃນເວລາດຽວກັນກໍ ເກີດມີການແບ່ງແຍກຊັບສົມບັດທີ່ດິນຂ້າທາດຂະຫນາດໃຫຍ່ມາເປັນພາກສ່ວນທີ່ ດິນຂະຫນາດນ້ອຍເພື່ອໃຫ້ພວກບ່າວນາສັບຊ່າວ. ບ່າວນາ ບໍ່ແມ່ນຂ້າທາດອີກ ແລ້ວ ແຕ່ຫາກແມ່ນຊາວໄຮ່ນາ ທີ່ຮັບພາລະເຮັດວຽກໃນພາກສ່ວນທີ່ດິນແບ່ງ ປັນ ແລະ ໃນການນຳໃຊ້ພາກສ່ວນທີ່ດິນດັ່ງກ່າວນັ້ນ ກໍຈະທົດແທນດ້ວຍ ເງິນ ຈຳນວນໃດຫນຶ່ງຫລືດ້ວຍຜົນຜະລິດ. ບ່າວນາ ບໍ່ແມ່ນຜູ້ເຊົ່າທີ່ດິນທີ່ມີອິດສະຫຼະ ພາບແຕ່ຢ່າງໃດ, ເຂົາເຈົ້າຕ້ອງຕິດພັນກັບພາກສ່ວນທີ່ດິນ ແບ່ງປັນຢ່າງ ປະ ຖິ້ມບໍ່ໄດ້ ແລະ ເຂົາເຈົ້າເອງຈະຖືກຂາຍພ້ອມກັບທີ່ດິນ. ພວກບ່າວນາ ແມ່ນ ຜູ້ໃຫ້ກຳເນີດທາດກະສິກອນໃນຍຸກສະໄຫມກາງ.

ດັ່ງນັ້ນ ຈາກພື້ນຖານລະບອບຂ້າທາດນັ້ນເອງ ຈຶ່ງໄດ້ມີການກຳເນີດ-ແບບວິທີການຜະລິດແບບໃຫມ່ຂຶ້ນຄືແບບວິທີການຜະລິດສະໄຫມສັກດິນາ.

ພ້ອມດ້ວຍການຂະຫຍາຍຕົວຂອງເສດຖະກິດສະໄຫມຂ້າທາດນັ້ນ ການ ຕໍ່ສູ້ຊົນຊັ້ນລະຫວ່າງຜູ້ຖືກຂູດຮີດ ແລະ ຜູ້ຂູດຮີດກໍນັບມື້ນັບຮຸນແຮງຂຶ້ນ. ການຕໍ່ ສູ້ດັ່ງກ່າວກາຍເປັນການຕໍ່ສູ້ຂອງພວກຂ້າທາດຕ້ານເຈົ້າທາດ. ຊາວໄຮ່ນາເສ ລີ ແລະ ນາຍຊ່າງຫັດຖະກຳທີ່ຖືກພວກເຈົ້າທີ່ດິນ ແລະ ລັດຂ້າທາດຂູດຮີດ - ຢ່າງຫນັກຫນ່ວງນັ້ນຕ່າງກໍໃຫ້ການຮ່ວມມືໂດຍສົມທົບກັບພວກຂ້າທາດໃນການຕໍ່ ສູ້ລຸກຮືດັ່ງກ່າວ. ໃນບັນດາຂະບວນການລຸກຮື້ຕ່າງໆຂອງພວກຂ້າທາດນັ້ນ ສຳ ຄັນກວ່າຫມູ່ຫມົດແມ່ນຂະບວນການລຸກຮື້ພາຍໃຕ້ການນຳພາຂອງສະປາກຕັກ(ປີ ກ૪-ກ૧ ກ່ອນຄຣິດຕະສັກກະລາດ).

ບາດຄ້ອນພາຍໃນ ສົມທົບກັບບາດຄ້ອນພາຍນອກ ນັບມື້ນັບຫນັກຫນ່ວງ. ສິ່ງດັ່ງກ່າວໄດ້ເຮັດໃຫ້ລະບອບຂ້າທາດ ກ້າວເຂົ້າສູ່ການອະວະສານ ຢ່າງສົ້ນ ເຊີງ.

ຂ. ແບບວິທີການຜະລິດສະໄຫມສັກດິນາ

ຢູ່ໃນຕົວຢ່າງຂ້າງເທິງນີ້ມາດຕະຖານລຸນຄ່າສ່ອມເກົ່ານ ໄດ້ຖືບຕົວສູງ ຂຶ້ນ ຈາກ ๑๐๐% ເຖິງ ๘๗๗% ບໍ່ແມ່ນມາຈາກສາຍເຫດການແກ່ຍາວອັນທຳງ່ານ ແບບເດັດຖານ ແຕ່ເນື່ອງມາຈາກການປ່ຽນແປງຄວາມກ່ຽວພັນກັນລະ ຫວ່າງ ໂມງເວລາທຳງ່ານຕົ້ນຕໍ ແລະ ໂມງເວລາທຳງ່ານສ່ອມເກົ່ານັ້ນເອງ.

ລຸນຄ່າສ່ອມເກົ່ານ ๙๐ ๕ ທີ່ເກີດຂຶ້ນຈາກສາຍເຫດການຫລຸດຜ່ອນໂມງເວລາ ທຳ ງ່ານຕົ້ນຕໍ ແລະ ຈາກສາຍເຫດການເພີ່ມທະວີໂມງເວລາທຳງ່ານສ່ອມ ເກົ່ານ ๑ ຈຶ່ງມາຈາກການຍົກສູງສະມັດຖະພາບແຮງງ່ານນັ້ນເພີ່ມຂຶ້ນວ່າ <u>ລຸນຄ່າ ສ່ອມ ເກົ່ານແບບທຽບຖານ.</u>

ໃນເງື່ອນໄຂຕົວຈິງຈຳນວນໜຶ່ງ ພວກນາຍທຶນຍັງໄດ້ຮັບລຸນຄ່າສ່ອມເກົ່ານ ເພີ່ມເຕີ່ມ ๑ ๙ ๑ ອີກ.

ລຸນຄ່າສ່ອມເກົ່ານເພີ່ມເຕີ່ມ ລຸນຄ່າສ່ອມເກົ່ານເພີ່ມເຕີ່ມແມ່ນຮູບການ - ໜຶ່ງຂອງລຸນຄ່າສ່ອມເກົ່ານແບບທຽບຖານ.

ນາຍທຶນແຕ່ລະຄົນມຸ່ງໜາຍຢາກໄດ້ຮັບກຳໄລຫລາຍເທົ່າທີ່ຈະຫລາຍໄດ້. ເພື່ອ ຈຸດປະສົງດັ່ງກ່າວນີ້ ນັ້ນຈຶ່ງນຳເອົາເຄື່ອງກົນຈັກອຸປະນິດໃໝ່, ເຕັກນິກ ແບບ ໃໝ່ທັນສະໄໝເຂົ້າຕິດຕັ້ງຢູ່ໂຮງຈັກໂຮງ່ານຂອງນັ້ນ ແລະ ຈາກນັ້ນ ກໍຈະ ສາມາດຍົກສູງສະມັດຖະພາບແຮງງ່ານຂຶ້ນ ແລະ ສາມາດຫລຸດຜ່ອນມູນຄ່າ - ຂອງສິນຄ້າເອງລົງໄດ້ໃນລະດັບປານກາງ ຖ້າສົມທຽບກັບມູນຄ່າສິນຄ້າທີ່ ຜະ ລິດຢູ່ໃນຂະແໜງການຜະລິດປະເພດດຽວກັນ. ຍອມວ່າລາຄາສິນຄ້າ ຢູ່ຫ່ວງ ຕະຫລາດໄດ້ຖືກກຳນົດດ້ວຍເງື່ອນໄຂຂະໜາດປານກາງຂອງການຜະລິດ ສະ ນັ້ນນາຍທຶນຈະຕ່ອງ ໄດ້ຮັບມາດຕະຖານລຸນຄ່າສ່ອມເກົ່ານສູງກ່ວາຫາກສົມທຽບ ກັບລາຄາທຳມະດາ.

<u>ລຸນຄ່າສ່ອມເກົ່ານເພີ່ມເຕີ່ມ ແມ່ນຄວາມແຕກຕ່າງລະຫ່ວ່າ ມູນຄ່າສິນຄ້າ ຂອງສັ່ງຄົມ ແລະມູນຄ່າຂັ້ນຕ່ຳຂອງສິນຄ້າເອງ.</u> ມັນ ມີ ๔ ຈຸດພ້ເສດດ່ວຍ ກັນ: ຂ້ໜຶ່ງ, ລຸນຄ່າສ່ອມເກົ່ານເພີ່ມເຕີ່ມນີ້ຈະໄດແກ່ພຽງແຕ່ເຈົ້າຂອງ ໂຮງ ຈັກໂຮງ່ານທີ່ເປັນຜູ້ທຳອິດທີ່ນຳໃຊ້ອຸປະກອນກົນຈັກອັນໃໝ່ ມີສະມັດຖະພາບ ສູງເທົ່ານັ້ນ, ຂ້ສ່ອງ, ການໄດ່ມາຊ່ງລຸນຄ່າສ່ອມເກົ່ານເພີ່ມເຕີ່ມໂດຍນາຍທຶນ ຜູ້ໃດຜູ້ໜຶ່ງນັ້ນ ແມ່ນປະກົດການຊ່ວຄາວ ຍອມວ່າຊ່າຫລ ໄວ ແນ່ນອນ ອຸປະ

ກອນກົນຈັກອັນໃຫມ່ທັນສະໄຫມນັ້ນ ຈະຕ້ອງຖືກນຳໃຊ້ຢູ່ຕາມໂຮງຈັກໂຮງງານ ແຫ່ງອື່ນໆອີກ ແລະ ເມື່ອນັ້ນນາຍທຶນຜູ້ທີ່ ຊຸປະກອນ ດັ່ງກ່າວເປັນຜູ້ທຳອິດນັ້ນ ກໍຈະສູນເສຍທາດີເລີດຂອງຕົນລົງ ແລະ ກໍຈະບໍ່ໄດ້ຮັບຄຸນຄ່າສ່ວນເກີນ ເພີ່ມ ເຕີມຕື່ມອີກ. ແຕ່ວ່າຄຸນຄ່າສ່ວນເກີນເພີ່ມເຕີມຫາກສູນຕົວຢູ່ໃນໂຮງຈັກ ໂຮງ ງານແຫ່ງໜຶ່ງແລ້ວ ມັນກໍຈະປະກົດຕົວຢູ່ອີກແຫ່ງໃຫມ ເນື່ອງຈາກເຈົ້າ ຂອງ ໂຮງງານແຫ່ງນັ້ນໄດ້ນຳໃຊ້ເຕັກນິກທີ່ທັນສະໄຫມກວ່າອີກ.

ຄຸນຄ່າສ່ວນເກີນເພີ່ມເຕີມມີບົດບາດສຳຄັນ ໃນການຂະຫຍາຍຕົວຂອງລະ ບອບທຶນນິຍົມ. ເພື່ອແຍ່ງຊິງເອົາຄຸນຄ່າສ່ວນເກີນເພີ່ມເຕີມນັ້ນ ໄດ້ບັງເກີດມີ ການເລັ່ງຂະຫຍາຍດ້ານເຕັກນິກກັນຢ່າງຈຸມວາຍ. ແຕ່ໃນເວລາດຽວກັນນາຍ ທຶນຜູ້ທີ່ນຳໃຊ້ເຕັກນິກ ແລະ ເຕັກໂນໂລຢີອັນໃຫມ່ເຂົ້າສູ່ການຜະລິດນັ້ນໄດ້ພະ ຍາຍາມປິດໄວ້ເປັນຄວາມລັບສະເໝີ, ແລະດ້ວຍເຫດນີ້ຈຶ່ງໄດ້ດຶງເອົາ ການ ນຳໃຊ້ນັ້ນຢູ່ຕາມໂຮງຈັກໂຮງງານແຫ່ງອື່ນໆ. ສິ່ງດັ່ງກ່າວໄດ້ເພີ່ມທະວີ ການ ຊອງເສັ່ງກັນລະຫວ່າງບັນດານາຍທຶນດ້ວຍກັນແລະສ້າງຄວາມຂັດແຍ່ງຄັ່ງຕົ້ງ ຂຶ້ນລະຫວ່າງພວກເຂົາເຈົ້າເອງ.

ດ້ວຍເຫດນີ້ ການຍາດຊິງເພື່ອຄຸນຄ່າສ່ວນເກີນເພີ່ມເຕີມ ຈຶ່ງນຳໄປ ສູ່ ການເຕີບໃຫຍ່ຂະຫຍາຍຕົວທາງດ້ານກຳລັງການຜະລິດດ້ານໜຶ່ງ ແລະ ອີກ ດ້ານໜຶ່ງໄດ້ນຳໄປສູ່ການຖ່ວງດຶງການຂະຫຍາຍຕົວຂອງກຳລັງການຜະລິດ - ເອງ.

ສາມໄລຍະໃນການຂະຫຍາຍຕົວຂອງ ລະບອບທຶນນິຍົມດ້ານ ອຸດສາຫະກຳ

ການຜະລິດຄຸນຄ່າສ່ວນ ເກີນ-ແບບທຽບຖານນັ້ນແມ່ນມອນ ຢູ່ ບົນພື້ນຖານການເຕີບໃຫຍ່ທາງ ດ້ານສະມັດຖະພາບຂອງແຮງງານ. ດ້ວຍເຫດນີ້ການວິເຄາະເບິ່ງຄຸນຄ່າສ່ວນ ເກີນແບບທຽບຖານຈຶ່ງໄດ້ສະແດງໃຫ້ເຫັນໄດ້ ໓ ໄລຍະອັນເປັນປະຫວັດການ ຂອງການເຕີບໃຫຍ່ທາງດ້ານສະມັດຖະພາບແຮງງານຢູ່ໃນລະບອບທຶນນິຍົມຄື: ຮ່ວມມືກັນແບບທຳມະດາ, ໂຮງງານຫັດຖະກຳ, ການຜະລິດ ດ້ວຍກົນຈັກ. ຕາມປະຫວັດສາດແລ້ວ ຮູບການເພື່ອຍົກສະມັດຖະພາບແຮງງານໃຫ້ສູງຂຶ້ນຄັ້ງ ທຳອິດແລະແບບງ່າຍດາຍທຳມະດາທີ່ສຸດແມ່ນ <u>ການຮ່ວມມືກັນ</u> <u>ແບບທຳມະດາ</u>

<u>ແບບທຶນນິຍົມ.</u> ຫາດແທ້ຂອງມັນ ແມ່ນຢູ່ບ່ອນວ່າ ນາຍທຶນໄດ້ຮີບໂຮມເອົາກຳມະກອນຈຳນວນຫລາຍເຂົ້າເຮັດວຽກອັນດຽວຮ່ວມກັນຢູ່ໃນໂຮງງານໂຮງໜຶ່ງ.

ໃນເມື່ອວ່າຫລາຍໆຄົນມີໜ້າທີ່ເຮັດວຽກອັນໜຶ່ງອັນດຽວຮ່ວມກັນ ນາຍທຶນສາມາດບັງຄັບໃຫ້ກຳມະກອນອອກແຮງ ເຮັດວຽກດ່ວຍຈັງຫວະໄວ ຂຶ້ນ ໂດຍສົມທຽບໃສ່ ສະມັດຖະພາບແຮງງານສ່ວນຕົວຂອງແຕ່ລະຄົນ. ຜົນທີ່ ໄດ້ ຮັບ ຄື ສະມັດຖະພາບແຮງງານສູງຂຶ້ນ. ຕົວຢ່າງ, ສະມັດຖະພາບແຮງງານ ລວມຫາຄົນທີ່ເຮັດວຽກອັນດຽວຮ່ວມກັນ ຈະຕ້ອງສູງກວ່າສະມັດຖະພາບແຮງ ງານທີ່ເຮັດວຽກກະແຈກກະຈາຍ. ສະມັດຖະພາບແຮງງານອັນໃໝ່ນີ້ ໄດ້ ເຮັດໃຫ້ນາຍທຶນໄດ້ໃຊ້ຈ່າຍຫຍັງເລີຍ, ຍ້ອນວ່ານັ້ນພຽງແຕ່ຈ່າຍຄ່າແຮງງານ ກຳມະກອນແຕ່ລະຄົນເທົ່ານັ້ນ ແຕ່ຫາກຜົນຜະລິດພັດໄດ້ຮັບເກີນຄາດໝາຍ. ສະນັ້ນນາຍທຶນຈຶ່ງໄດ້ຮັບຜົນປະໂຫຍດຫລາຍຂຶ້ນ. ນອກຈາກນີ້ໃນເມື່ອໝູ່ນໃຊ້ ການອອກແຮງງານຂອງກຳມະກອນຫລາຍໆຄົນຮ່ວມກັນນາຍທຶນສາມາດປະຢັດ ສະຖານທີ່, ແສງສະຫວ່າງ, ເຊື້ອໄຟ ແລະອື່ນໆອີກ.

ການອອກແຮງງານເຮັດວຽກອັນດຽວຮ່ວມກັນຍັງໄດ້ສະແດງໃຫ້ເຫັນ ວ່າ ກຳມະກອນຜູ້ນຶ່ງຊຳນິຊຳນານວຽກງານດ້ານນຶ່ງຫລາຍກວ່າ ແລະ ຜູ້ນັ້ນກໍຊຳນານ ວຽກງານດ້ານນຶ່ງຫລາຍກວ່າປະເພດອື່ນ .

ຈາກສາຍເຫດດັ່ງກ່າວນີ້ ແລະ ເພື່ອໃຫ້ໄດ້ຮັບສິດຜົນປະໂຫຍດ ຫລາຍ ກວ່າເກົ່າ ນາຍທຶນຈຶ່ງມອບໝາຍວຽກງານດ້ານໃດໜຶ່ງໃຫ້ກຳມະກອນແຕ່ລະ ຄົນທີ່ມີຄວາມຊຳນານໃນວຽກງານດ້ານນັ້ນ. ດ່ວຍເຫດນີ້ຢູ່ໂຮງງານຕ່າງໆ ກໍ ດ່ອຍໆເກີດມີການແບ່ງປັນແຮງງານກັນຂຶ້ນ. ໂຮງຈັກໂຮງງານນາຍທຶນທີ່ນຳ ຢູ່ນີ້ພົ້ນຖານການແບ່ງປັນແຮງງານ ແລະ ເຕັກນິກຫັດຖະກຳ ເພີ້ນເອີ້ນວ່າ <u>ໂຮງງານຫັດຖະກຳ.</u>

ການແບ່ງປັນແຮງງານລະຫວ່າງບັນດາກຳມະກອນໄດ້ນຳໄປສູ່ການເພີ້ມ-ທະວີສະມັດຖະພາບແຮງງານຢ່າງວ່ອງໄວ. ຂໍຍົກເອົາຕົວຢ່າງໃນການຜະລິດ ເຂັມຄັດເສື້ອໃນສະຕະວັດທີ ๑๙. ໂຮງງານຫັດຖະກຳທີ່ປະກອບດ່ວຍ ຄົນງານ ๑๐ ຄົນສາມາດຜະລິດເຂັມຄັດໄດ້ ๔.๒๐๐ ດ່ວງຕໍ່ກຳມະກອນຜູ້ໜຶ່ງ, ໃນ ເວ ລາດຽວກັນທີ່ຍັງບໍ່ທັນມີການແບ່ງປັນວຽກງານນັ້ນ ຄົນງານຜູ້ໜຶ່ງຜະລິດໄດ້ແຕ່ ๘๐ ດ່ວງຕໍ່ມື້. ສະມັດຖະພາບແຮງງານເພີ້ມຂຶ້ນ ๘๔๐ ເທື່ອ.

ເງື່ອນໄຂແຮງງານຢູ່ໃນໂຮງຊ່າງຫັດຖະກຳຫຍຸ້ງຍາກທີ່ສຸດ ແລະ ຫນັກຫນ່ວງ. ຢູ່ໃນໂຮງຊ່າງຫັດຖະກຳ ກຳມະກອນໄດ້ເຮັດວຽກຂອງຕົນແບບງ່າຍດາຍຢ່າງຊຳໍ້ໆຊາກໆຢູ່ສະເຫມີ ແລະ ໂຮງງານດັ່ງກ່າວໄດ້ເຮັດໃຫ້ ກຳມະກອນປ່ວຍໂຊທາງດ້ານຮ່າງກາຍກໍ່ຄືຈິດໃຈ. ວັນທຳງານໄດ້ແກ່ຍາວເຖິງ ๑๗ ແລະຫລາຍໆຊົ່ວໂມງດ້ວຍອັດຕາເງິນເດືອນທີ່ຕຳ່ສຸດ.

ໂຮງຊ່າງຫັດຖະກຳໄດ້ສ້າງເງື່ອນໄຂເພື່ອກ້າວເຂົ້າສູ່ອຸດສາຫະກຳ ທີ່ປະກອບດ້ວຍເຄື່ອງກົນຈັກຂະຫນາດໃຫຍ່: ๑) ການເຮັດວຽກງ່າຍຂຶ້ນແລະ ສະດວກຂຶ້ນໂດຍການນຳໃຊ້ເຄື່ອງຈັກແທນມືຄົນງານ; ๒) ການປະຕິບັດ ວຽກງານໃດຫນຶ່ງກໍ່ໄດ້ໃຫ້ມີການນຳໃຊ້ເຄື່ອງມືແຮງງານ ສະເພາະແລະໄດ້ ອຳນວຍເງື່ອນໄຂສະດວກໃຫ້ແກ່ການປະດິດສ້າງເຄື່ອງຈັກຕ່າງໆ; ๓) ໂຮງຊ່າງຫັດຖະກຳກໍ່ໄດ້ສ້າງກຳມະກອນຊຳນານງານເພື່ອຮັບໃຊ້ອຸດສາຫະກຳທີ່ປະກອບດ້ວຍເຄື່ອງກົນຈັກ. ນີ້ຄືບົດບາດອັນເປັນປະຫວັດການຂອງໂຮງຊ່າງຫັດຖະກຳ.

ໂຮງຊ່າງຫັດຖະກຳໄດ້ກາຍເປັນໂຮງຈັກ. ເບື້ອງຕົ້ນອັນທີ່ເອີ້ນກັນ ວ່າເຄື່ອງຈັກກຳມະກອນກໍ່ໄດ້ປະກົດຕົວຂຶ້ນ. ມັນເຮັດຫນ້າທີ່ອັນດຽວກັນກັບ ກຳມະກອນເຄີຍໄດ້ເຮັດມາແຕ່ກ່ອນ. ແຕ່ວ່າການນຳໃຊ້ເຄື່ອງຈັກດັ່ງກ່າວນີ້ ພັດຍັງບໍ່ເທົ່າກັບແຮງງານຂອງກຳມະກອນ. ສະນັ້ນຈຶ່ງໄດ້ຄິດສ້າງຫົວຈັກຂຶ້ນເຊັ່ນເຄື່ອງຈັກອາຍນຳ້. ມັນສາມາດເຮັດໃຫ້ເຄື່ອງຈັກກຳມະກອນຫລາຍໆ ເຄື່ອງເຄື່ອນໄຫວໄດ້. <u>ໂຮງຈັກທົນນິຍົມ</u>ກໍ່ໄດ້ປະກົດຕົວຂຶ້ນໂດຍການນຳໃຊ້ລະບົບ - ເຄື່ອງຈັກທຳການຜະລິດສິນຄາ.

ການນຳໃຊ້ເຄື່ອງຈັກ ແລະ ການປັບປຸງ ດັດແປງເຄື່ອງຈັກດັ່ງກ່າວ ນັ້ນໄດ້ຍົກສະມັດຖະພາບແຮງງານສູງຂຶ້ນຢ່າງຫລວງຫລາຍ ແລະ ຫລຸດຜ່ອນ ຕົ້ນທຶນສິນຄາລົງ. ແຕ່ພ້ອມດຽວກັນນັ້ນ ກໍ່ໄດ້ເຮັດໃຫ້ຂະບວນບັນດາຊາວຜູ້ຜະລິດຂະຫນາດນ້ອຍແລະໂຮງງານຂະຫນາດນ້ອຍທີ່ອາໄສແຮງງານເຮັດດ້ວຍມືເປັນຕົ້ນຕໍຈຳນວນຫລວງຫລາຍ ພົບກັບຄວາມຫລົ້ມຈົມເສຍຫາຍຢ່າງຫນັກຫນ່ວງ.

ໂຮງຈັກທົນນິຍົມ ແມ່ນອີກບັ້ນໃຫມ່ແຫ່ງການກຳເນີດການກົດຂີ່ຂູດຮີດແຮງງານດ້ວຍທຶນ. ຢູ່ໂຮງຈັກ ກຳມະກອນໄດ້ກາຍເປັນສ່ວນເກີນຊະນິດຫນຶ່ງຂອງເຄື່ອງຈັກ. ການນຳໃຊ້ເຄື່ອງຈັກໃນລະບອບທົນນິຍົມໄດ້ເຮັດໃຫ້ມີການ ແກ່ຍາວວັນທຳງານອອກຕື່ມ, ແກ່ດຶງເອົາແມ່ຍິງແລະເດັກນ້ອຍເຂົ້າສູ່ການ ຜະ

ລິດ, ເກີດມີໄພຫວ່າງງານຂຶ້ນ, ສະພາບຊີວິດການເປັນຢູ່ຂອງຊາວກຳມາຊີບ ຊຸດໂຊມລົງ. ແຕ່ວ່ານາຍທຶນບໍ່ໄດ້ນຳໃຊ້ເຄື່ອງຈັກໂດຍສະເຫມີໄປ. ການນຳ ໃຊ້ເຄື່ອງຈັກຢູ່ລະບອບທຶນນິຍົມມີຂອບເຂດຂອງມັນ. ຂອບເຂດການ ນຳໃຊ້ ເຄື່ອງຈັກ ທຶນນິຍົມໄດ້ກຳນົດໄວ້ຢູ່ບ່ອນວ່າ ພວກນາຍທຶນຈະນຳໃຊ້ ເຄື່ອງຈັກ ພຽງແຕ່ໃນກໍລະນີທີ່ວ່າລາຄາເຄື່ອງຈັກຫາກຕຳ່ກວ່າອັດຕາເງິນເດືອນຂອງບັນ ດາກຳມະກອນທີ່ຖືກຂັບໄລ່ໂດຍພວກນາຍທຶນເທົ່ານັ້ນ. ນາຍທຶນ ຈະນຳໃຊ້ ເຄື່ອງຈັກໄດ້ກໍຕໍ່ເມື່ອວ່າເຄື່ອງຈັກດັ່ງກ່າວຈະນຳເອົາຜົນກຳໄລໃຫ້ແກ່ຕົນ.ສະ ນັ້ນການຜະລິດດ້ວຍເຄື່ອງຈັກບໍ່ໄດ້ລົບລ້າງແຮງງານເຮັດດ້ວຍມືຢ່າງໃດ.ແຮງ ງານເຮັດດ້ວຍມືໄດ້ຖືກນຳໃຊ້ຢ່າງກວ້າງຂວາງຈົນເຖິງເທົ່າປະຈຸບັນ ທັງຢູ່ - ຕາມບັນດາປະເທດທຶນນິຍົມຂະຫຍາຍຕົວແລ້ວເຊັ່ນຢູ່ສະຫະລັດອາເມລິກາ,ອັງ ກິດ.

ການຂ້າມຜ່ານຈາກໂຮງຊ່າງຫັດຖະກຳໄປສູ່ໂຮງຈັກນັ້ນຫມາຍເຖິງ ການ ຍືນຍົງຢ່າງສົມບູນຂອງແບບວິທີການຜະລິດທຶນນິຍົມ.

ຂໍ້ຂັດແຍ່ງຕົ້ນຕໍຂອງລະ ບອບທຶນນິຍົມ

ຢູ່ບົນພື້ນຖານອຸດສາຫະກຳເຄື່ອງກົນຈັກ ຂະ ຫນາດໃຫຍ່ໄດ້ເກີດມີຂະບວນການຫັນ ແຮງ ງານແລະການຜະລິດເປັນຂອງສັງຄົມຢ່າງສັບ ສົນ. ແທນໂຮງຊ່າງຫັດຖະກຳຂະຫນາດນ້ອຍກໍໄດ້ເກີດມີໂຮງຈັກໂຮງງານຂະ ຫນາດໃຫຍ່ຕ່າງໆຊຶ່ງປະກອບດ້ວຍກຳມະກອນນັບເປັນພັນເປັນຫມື່ນຄົນທີ່ມີວິຊາ ສະເພາະແຕກຕ່າງກັນ. ການແບ່ງປັນວຽກງານຢູ່ໃນການຜະລິດ ສັງຄົມ ກໍ ເຕີບໃຫຍ່ຂະຫຍາຍຕົວຂຶ້ນ. ໂຮງຈັກໂຮງງານທຸກໆແຫ່ງແລະ ທຸກໆຂະແຫນງ ການອຸດສາຫະກຳກໍປະສານສົມທົບກັນ ແລະຂາດຈາກກັນບໍ່ໄດ້. ເຊັ່ນ, ໂຮງ ງານຜະລິດກົນຈັກກໍບໍ່ສາມາດທຳງານໄດ້ຫາກປາສະຈາກຜະລິດຕະພັນ ຂອງ ໂຮງງານຫລອມໂລຫະ, ໂຮງງານຫລອມໂລຫະ ກໍຈະຫຳງານບໍ່ໄດ້ເຊັ່ນດຽວ ກັນຫາກຂາດຖ່ານຫີນ, ບໍ່ຖ່ານຫີນກໍຂຶ້ນກັບໂຮງງານຜະລິດກົນຈັກແລະໂຮງ - ງານອື່ນໆ. ດ້ວຍເຫດນີ້ການຜະລິດຈຶ່ງມີລັກສະນະຮູບການລວມຂອງສັງຄົມ . ສິນຄ້າຕ່າງໆຈະຖືກຜະລິດດ້ວຍແຮງງານກຳມະກອນຫລາຍຮ້ອຍຫລາຍພັນຄົນ.

ນອກຈາກນີ້ແລ້ວ ຢູ່ລະບອບທຶນນິຍົມ ທຸກໆໂຮງຈັກໂຮງງານແລະລວມທັງ

ທີ່ດິນ ພ້ອມດ້ວຍຊັບພະຍາກອນທຳມະຊາດແມ່ນເປັນກຳມະສິດສ່ວນຕົວທັງນັ້ນ. ຜົນຜະລິດຂອງແຮງງານສັງຄົມກໍຖືກພວກນາຍທຶນກອບໂກຍ. ຂໍ້ຂັດແຍ່ງກໍເກີດຂຶ້ນແລະຂະຫຍາຍກວ້າງອອກ ລະຫວ່າງລັກສະນະເປັນຂອງສັງຄົມຂອງ ການ ຜະລິດແລະ ຮູບການທຶນນິຍົມເອກະເທດ ໃນການຍຶດຄອງຫມາກຜົນແຫ່ງການ ຜະລິດ. ນີ້ຄືຂໍ້ຂັດແຍ່ງຕົ້ນຕໍຂອງລະບອບທຶນນິຍົມ.

ຂໍ້ຂັດແຍ່ງຕົ້ນຕໍຂອງລະບອບທຶນນິຍົມສະແດງໃຫ້ເຫັນການຂັດແຍ່ງ ລະ ຫວ່າງກຳລັງການຜະລິດທີ່ຂະຫຍາຍຕົວແລະການພົວພັນແຫ່ງການຜະລິດທຶນນິ-ຍົມ. ເຖິງວ່າໄດ້ເຕົ້າໂຮມການຜະລິດສູງຂຶ້ນກໍຕາມ ໃນເວລາດຽວກັນນີ້ ລະ ບອບທຶນນິຍົມກໍໄດ້ກີດຂວາງການຂະຫຍາຍຕົວຂອງກຳລັງການຜະລິດຂອງ ສັງ ຄົມ. ເພື່ອທຳລາຍຂໍ້ກີດຂວາງດັ່ງກ່າວນີ້ຈຳຕ້ອງລົບລ້າງກຳມະສິດທຶນນິຍົມ . ໃນເມື່ອກຳລັງການຜະລິດຖືກຂະຫຍາຍຕົວອອກລະບອບທຶນນິຍົມຈະໃຫ້ກຳເນີດ ແກ່ຜູ້ຂຸດຫລຸມຝັງສົບຕົນຂຶ້ນຄື ຊາວກຳມາຊີບ ຊຶ່ງເປັນກ້ອນກຳລັງແຮງ ອັນສຳ ຄັນທີ່ຈະທຳລາຍກຳມະສິດສ່ວນຕົວ ແລະ ຈັດຕັ້ງກຳມະສິດສັງຄົມນິຍົມຂຶ້ນແທນ

ຜ. ຄ່າແຮງງານ ຢູ່ໃນລະບອບທຶນນິຍົມ

ທາດແທ້ຂອງຄ່າແຮງງານ ທີ່ຜ່ານມາຂ້າງເທິງນັ້ນ ພວກເຮົາໄດ້ອະທິ ບາຍແຈ້ງແລ້ວວ່າ ແຮງງານຄົນຢູ່ໃນ ລະ ບອບທຶນນິຍົມແມ່ນເປັນສິນຄ້າແລະມີຄຸນຄ່າ. ຄຸນຄ່າຂອງແຮງງານຄົນທີ່ ສະ ແດງອອກເປັນເງິນຕານັ້ນຄື ລາຄາແຮງງານຄົນ.

ເພື່ອປົກປິດຄວາມຈິງກ່ຽວກັບການກົດຂີ່ຂູດຮີດທຶນນິຍົມນັ້ນ ບັນດານັກວິທະ ຍາສາດນາຍທຶນໄດ້ພາກັນຢືນຢັນວ່າ ຄ່າແຮງງານແມ່ນລາຄາແຮງງານ ຂອງ ກຳມະກອນ. ຕາມຄວາມເວົ້າຂອງເຂົາເຈົ້າ ກຳມະກອນອອກແຮງງານເຮັດ ວຽກຢູ່ໂຮງຈັກໂຮງງານທຶນນິຍົມ, ທຳການຜະລິດສິນຄ້າປະເພດຕ່າງໆ ແລະ ເຂົາກໍຈະໄດ້ຮັບລາຄາແຮງງານໃນການອອກແຮງງານຂອງຕົນກໍຄືໄດ້ຮັບ ຄ່າ ແຮງງານນັ້ນເອງ.

ສັງເກດເບິ່ງແລ້ວກໍຄ້າຍໆກັບວ່າ ອັດຕາຄ່າຈ້າງແມ່ນການຊຳລະຄ່າແຮງ ງານ ເພາະວ່າກຳມະກອນຈະໄດ້ຮັບອັດຕາຄ່າແຮງງານກໍຕໍ່ເມື່ອວ່າເຂົາ ໄດ້

ອອກແຮງງານຜ່ານມາແລ້ວໃນຊົ່ວໄລຍະໂມງເວລາໃດໜຶ່ງ. ອັດຕາ ແຮງ ງານຈະຖືກກຳນົດຕາມປະລິມານຊົ່ວໂມງເວລາທີ່ໄດ້ທຳງານຜ່ານມາ (ລາຍ ຊົ່ວໂມງ, ລາຍວັນ, ລາຍອາທິດ) ຫລືຕາມປະລິມານຜະລິດຕະພັນ. ຕາມ ທັດສະນະຂອງທ່ານ ກ.ມາກ ໃນຕົວຈິງແລ້ວອັດຕາຄ່າແຮງງານແມ່ນຮູບການ ຫັນປ່ຽນແບບປົດບັງຂອງມູນຄ່າຫລືຂອງລາຄາສິນຄ້າກໍຄືແຮງງານຄົນ.

ແຮງງານບໍ່ແມ່ນສິນຄ້າເພາະສະນັ້ນ ແຮງງານຈຶ່ງບໍ່ມີມູນຄ່າແລະ ລາຄາ. ຄວາມຈິງແລ້ວ ເພື່ອຈະສາມາດຂາຍແຮງງານໄດ້ ຈະຕ້ອງມີແຮງງານຕົວຈິງ ເສຍກ່ອນ. ເພິ່ນບໍ່ສາມາດຂາຍສິ່ງໃດທີ່ບໍ່ມີຢູ່ໃນຕົວຈຸ. ເຊັ່ນຕົວຢ່າງ,ນາຍ ຊ່າງເຮັດເກີບໂບກໄດ້ນຳເອົາເກີບໂບກຂອງຕົນໄປສູ່ຫ້ວງຕະຫລາດກໍເພາະ-ວ່າເຂົາມີເກີບໂບກຕົວຈິງໃນກຳມືຢູ່ແລ້ວ ແລະ ເຂົາກໍຈະສາມາດຂາຍໄດ້ . ແຕ່ໃນເມື່ອວ່າກຳມະກອນໄດ້ເປັນລູກຈ້າງຂອງນາຍທຶນ ເມື່ອນັ້ນຍັງບໍ່ມີແຮງ-ງານຕົວຈິງເລີຍ, ມີພຽງແຕ່ຄວາມສາມາດຕໍ່ອຸກງານເທົ່ານັ້ນ ແມ່ນຄວາມ-ສາມາດດັ່ງກ່າວນີ້ເອງທີ່ກຳມະກອນຂາຍແກ່ນາຍທຶນ. ນາຍທຶນຊື້ແຮງງານຄົນ ແລະຊຳລະຄ່າແຮງງານແຕ່ນາຍທຶນບໍ່ຮອມ ສົນໃຈຕໍ່ຕົວກຳມະກອນເອງ ເລີຍ ແຕ່ຫາກສົນໃຈຕໍ່ຄວາມສາມາດຂອງເຂົາຕໍ່ອຸກງານແລະຄວາມສາມາດ ຂອງ ກຳມະກອນຕໍ່ການສ້າງມູນຄ່າສ່ວນເກີນໃຫ້ນັ້ນຕ່າງຫາກ.

ຖ້າເບິ່ງຕາມຮູບນອກແລ້ວ ອັດຕາຄ່າແຮງງານຢູ່ໃນສັງຄົມທຶນນິຍົມ ເປັນ ເໝືອນດັ່ງການຊຳລະຄ່າແຮງງານ ສະນັ້ນຈຶ່ງຄ້າຍກັບວ່າໜົດແຮງງານ ກຳ ມະກອນໄດ້ຖືກຊຳລະຢ່າງເຕັມສ່ວນ. ຂໍຍົກຕົວຢ່າງວ່າ ເພື່ອທຳການ ຜະລິດ ວັດຖຸດຳລົງຊີວິດທີ່ຈຳເປັນສຳລັບກຳມະກອນ ແລະຄອບຄົວເຂົານັ້ນ ຕ້ອງ ໃຊ້ ໂມງທຳງານ ຜ ຊົ່ວໂມງ. ຖ້າວ່າ ๑ ຊົ່ວໂມງເທົ່າກັບ ๑ ໂດລາ ເມື່ອນັ້ນ ມູນຄ່າແຮງງານຄົນກໍເທົ່າກັບ ຜ ໂດລາ. ນາຍທຶນໄດ້ທຳການຊຳລະມູນ ຄ່າ ເຕັມແກ່ແຮງງານກຳມະກອນຄື ຜ ໂດລາ-ແຕ່ຖ້າວ່າວັນທຳງານຫາກແມ່ນຍາວ ຮອດ ๑๘ ຊົ່ວໂມງ ເມື່ອນັ້ນ ๑ ຊົ່ວໂມງຈະຖືກຊຳລະຕົວຈິງພຽງແຕ່ ๕๐ ເຊັ່ນເທົ່ານັ້ນ. ຄ່າແຮງງານໄດ້ປົກປິດສິ່ງທີ່ວ່ານາຍທຶນໄດ້ທຳການຊຳລະ ແຕ່ ຄ່າດັ່ງວັນທຳງານເທົ່ານັ້ນ ສ່ວນອີກດັ່ງໜຶ່ງນັ້ນບໍ່ໄດ້ຊຳລະໃຫ້ເລີຍ. ດ້ວຍ ເຫດນີ້ ຄ່າແຮງງານຈຶ່ງປົດບັງການແບ່ງແຍກໂມງເວລາທຳງານເປັນ ໂມງ ເວລາທຳງານຕົ້ນຕໍແລະເວລາທຳງານສ່ວນເກີນກໍຄືໂມງເວລາທຳງານຊຳລະ

ແລະບໍ່ຊຳລະ. ຄ່າແຮງງານໄດ້ສະແດງໃຫ້ເຫັນຄ້າຍກັບວ່າ ຫມົດແຮງງານ-ກຳມະກອນຮັບຈ້າງໄດ້ຖືກຊຳລະຢ່າງເຕັມສ່ວນແຕ່ຕົວຈິງມັນໄດ້ປົດບັງທຸກການ ກະທຳການກົດຂີ່ຂູດຮີດ. ຢູ່ໃນທີ່ນີ້ ແມ່ນຫນຶ່ງໃນຄວາມແຕກຕ່າງອັນຕົ້ນຕໍ ລະ ຫວ່າງລະບອບທຶນນິຍົມ ແລະ ສັງຄົມຂູດຮີດຕ່າງໆທີ່ຜ່ານມາກ່ອນຫນ້ານັ້ນ.ຕົວ ຢ່າງຢູ່ໃນລະບອບສັງຄົມຂ້າທາດ ການກົດຂີ່ຂູດຮີດແມ່ນເຮັດລັກສະນະ ເປີດ ແປນທີ່ສຸດ. ຂ້າທາດໄດ້ກາຍເປັນວັດຖຸເຄື່ອງຂອງຊະນິດຫນຶ່ງຂອງເຈົ້າ ທາດ ແລະຈະບັງຄັບບັນຊາໃຫ້ເຮັດຫຍັງກໍໄດ້ຕາມຊອບໃຈ: ບັງຄັບຂ້າທາດໃຫ້ເຮັດ ວຽກອອກແຮງງານແຕ່ເຊົ້າຈົນຮອດກາງຄືນ, ລ້ຽງເກືອກໍພໍທຸເລົາຄວາມຫິວ. ນອກນັ້ນເຂົາຍັງສາມາດຂ້າຕີ ແລະ ສຸດທ້າຍເຈົ້າທາດຍັງບໍ່ໄດ້ຊຳລະອັນ ໃດ ໃຫ້ແກ່ຂ້າທາດເລີຍ. ຕົກມາສະໄຫມສັກດິນາ ຊາວໄຮ່ນາໄດ້ນຳເອົາດອກ - ເບ້ຍທີ່ດິນມອບໃຫ້ເຈົ້າທີ່ດິນຕາມຮູບການຊຳລະຕ່າງໆ (ອອກແຮງງານ ຮັບ ຈ້າງແທນຫນີ້, ວັດຖຸເຂົ້າຂອງຕາງໆຫລືເງິນສົດ). ສ່ວນຢູ່ໃນລະບອບ ທຶນນິ ຍົມ ການກົດຂີ່ຂູດຮີດຖືກປົກປິດເຊື່ອງອຳ ໄວ້. ມອງເບິ່ງແລ້ວກໍເຫມືອນດັ່ງ ວ່າບໍ່ມີການກົດຂີ່ຂູດຮີດໃດໆເລີຍ ແລະຫມົດທຸກແຮງງານກຳມະກອນກໍເຫມືອນ ຖືກຊຳລະໃຫ້ຢ່າງເຕັມສ່ວນ. ຄ່າແຮງງານໄດ້ປົກປິດທຸກການຂູດຮີດກຳມະ - ກອນຢູ່ໃນລະບອບທຶນນິຍົມ.

ຮູບການຕ່າງໆຂອງຄ່າແຮງງານ ຢູ່ໃນລະບອບທຶນນິຍົມຄ່າແຮງງານ ມີຮູບການທີ່ແຕກຕ່າງກັນ. ແຮງ ງານກຳມະກອນທີ່ໄດ້ທຳການຜະລິດຕາມຊົ່ວໂມງເວລາໃດຫນຶ່ງຜ່ານມາ ນັ້ນ ລາຍວັນ, ລາຍອາທິດ, ລາຍເດືອນ ແລະຕໍ່ໆໄປ ຈະເປັນ<u>ອັດຕາຄ່າແຮງ - ງານຕາມເວລາເຮັດວຽກ.</u>

ເພື່ອຈະເຂົ້າໃຈໃຫ້ຖືກຕ້ອງຕໍ່ທາດແທ້ຂອງການຊຳລະຄ່າແຮງງານ ຕາມ ເວລາເຮັດວຽກຢູ່ໃນລະບອບທຶນນິຍົມນັ້ນ ຕ້ອງສົມທຽບມັນໃສ່ວັນທຳງານ ກຳ ມະກອນທັງຫມົດ. ຕົວຢ່າງ ນາຍທຶນຜູ້ຫນຶ່ງຊຳລະຄ່າແຮງງານໃຫ້ກຳມະກອນ ๑๐ ໂດລາຕໍ່ມື້ແລະກຳມະກອນຕ້ອງເຮັດວຽກ ๑๐ຊົ່ວໂມງ. ໃນເມື່ອນັ້ນ ລາ ຄາຜ້ານກາງຂອງ ๑ ຊົ່ວໂມງທຳງານຈະເທົ່າກັບ ๑ ໂດລາ. ຖ້າວ່າ ນາຍ ທຶນຜູ້ນີ້ຫາກແກ່ຍາວວັນທຳງານຈາກ ๑๐ ເປັນ ๑๘ ຊົ່ວໂມງແລ້ວ ເມື່ອ ນັ້ນ

ลาคาแธวงาน ๑ ຊົ່ວໂມງຈະຫລຸດ ຕຳ່ຈາກ ๑ ໂດລາເປັນ ຊຸມ ເຊັ່ນ . ຈາກກໍລະນີດັ່ງກ່າວນີ້ ກໍສາມາດເຂົ້າໃຈໄດ້ວ່າ ລະບົບການຊຳລະຄ່າ ແຮງງານຕາມເວລາເຮັດວຽກໄດ້ກາຍເປັນພາຫະນະເພີ່ມທະວີການກົດຂີ່ຂູດຮີດກຳມະກອນ. ຄຽງຄູ່ກັບການຊຳລະຄ່າແຮງງານຕາມເວລາເຮັດວຽກນີ້ກໍຍັງມີຮູບການອື່ນອີກເຊັ່ນ ອັດຕາຄ່າແຮງງານຕາມຜົນຜະລິດ.

ອັດຕາ<u>ຄ່າແຮງງານຕາມຜົນຜະລິດ</u> ແມ່ນຮູບການແຮງງານທີ່ບໍລິມາດຂອງມັນຂຶ້ນກັບປະລິມານຜະລິດຕະພັນທີ່ກຳມະກອນໄດ້ປຸງແຕ່ງອອກພາຍໃນຕະຫຼອດໄລຍະໂມງເວລາທຳງານໃດຫນຶ່ງ (ເຊັ່ນ, ພາຍໃນຊົ່ວໂມງ, ມື້).

ທ່ານ ກ.ມາກ ໄດ້ເອີ້ນອັດຕາຄ່າແຮງງານຕາມຜົນຜະລິດເປັນຮູບ ການຫັນປ່ຽນຂອງອັດຕາຄ່າແຮງງານຕາມເວລາເຮັດວຽກ. ຄວາມຈິງແລ້ວ ເພື່ອກຳນົດຕີລາຄາຊຳລະຄ່າແຮງງານຜະລິດຕະພັນແຕ່ລະຫົວຫນ່ວຍນັ້ນ ເພີ່ນຕ້ອງຄຳນຶງເຖິງສິ່ງດັ່ງນີ້: ກ) ອັດຕາຄ່າແຮງງານຕາມເວລາເຮັດວຽກ ແລະ ຄ) ປະລິມານຜະລິດຕະພັນທີ່ໄດ້ປຸງແຕ່ງໂດຍກຳມະກອນຜູ້ດີເດັ່ນທີ່ສຸດພາຍໃນມື້ຫນຶ່ງ.

ຖ້າວ່າອັດຕາຄ່າແຮງງານຕາມເວລາເຮັດວຽກຫາກປະກອບມີ ๑๐ ໂດລາ ແລະ ປະລິມານຜະລິດຕະພັນທີ່ໄດ້ປຸງແຕ່ງສຳເລັດນັ້ນມີ ๔๐ ອັນຕໍ່ມື້ເມື່ອນັ້ນນາຍທຶນຈະຊຳລະ ๐,๕ ໂດລາຕໍ່ຜະລິດຕະພັນແຕ່ລະອັນ. ໃນກໍລະນີ ນີ້ນາຍທຶນໄດ້ເຮັດໃຫ້ອັດຕາຄ່າແຮງງານຕາມຜົນຜະລິດບໍ່ສູງກວ່າອັດຕາຄ່າແຮງງານຕາມເວລາເຮັດວຽກ. ຖ້າເປັນເຊັ່ນນີ້ແລ້ວ ເປັນຫຍັງນາຍທຶນຈຶ່ງປະຕິ-ບັດລະບົບຈ່າຍຄ່າແຮງງານຕາມຜົນຜະລິດ ? ກໍເພາະວ່າອັດຕາຄ່າແຮງງານຕາມຜົນຜະລິດມີຈຸດພິເສດຫລາຍຢ່າງຊຶ່ງບາງຄັ້ງກໍເຮັດໃຫ້ນາຍທຶນໄດ້ຮັບ - ຫມາກຜົນຫລາຍຂຶ້ນຕື່ມ. ເຊັ່ນຕົວຢ່າງ, ໃນລະບົບຄ່າແຮງງານປະເພດ ດັ່ງກ່າວ ຄຸນນະພາບແຮງງານຖືກກວດກາໂດຍຜົນຜະລິດ. ນາຍທຶນຊຳລະ ຄ່າຜົນຜະລິດຕາມຄຸນນະພາບປານກາງແລະສູງ. ຜົນຜະລິດໃດທີ່ມີຄຸນນະພາບ ບໍ່ດີກໍຈະບໍ່ຖືກຊຳລະໃຫ້ແຕ່ຢ່າງໃດ. ຮູບການຊຳລະ ຄ່າແຮງງານດັ່ງກ່າວ ໄດ້ເຮັດໃຫ້ການໃຊ້ແຮງງານຂອງກຳມະກອນຫນັກຫນ່ວງຂຶ້ນ ຍ້ອນວ່າກຳມະກອນເອງກໍມຸ່ງຫວັງຊ່ວງຊິງໃຫ້ໄດ້ຜົນຜະລິດທີ່ມີຄຸນນະພາບດີແລະໄດ້ປະລິມານ ສູງເພື່ອຈະໄດ້ຮັບເງິນຫລາຍຂຶ້ນຕື່ມອີກ. ໃນເມື່ອຜົນຜະລິດຂອງກຳມະກອນ ສູງ

ຂໍ້ນ ນາຍທຶນກໍຕົລາຄາຜົນຜະລິດຕຳ່ລົງ ເພື່ອຈະໄດ້ເພີ່ມກຳໄລຂອງຕົນຂໍ້ນ . ສະນັ້ນ ທ່ານ ກ.ມາກ ຈຶ່ງໄດ້ເວົ້າວ່າ ກຳມະກອນເຮັດວຽກຫລາຍຂໍ້ນ ເທົ່າໃດ ເຂົາຈະໄດ້ຮັບຄ່າແຮງງານຫນ້ອຍລົງເທົ່ານັ້ນ.

ໂດຍອີງຕາມເງື່ອນໄຂຕົວຈິງ ພວກນາຍທຶນໄດ້ນຳໃຊ້ຮູບການຊຳລະ ຄ່າແຮງງານຫລາຍໆຢ່າງແຕກຕ່າງກັນ. ຕາມປະຫວັດສາດຜ່ານມານັ້ນ ຮູບການຊຳລະຄ່າແຮງງານຕາມເວລາເຮັດວຽກໄດ້ເກີດມີຂໍ້ນກ່ອນຮູບການຊຳລະ ຄ່າແຮງງານຕາມຜົນຜະລິດ ແລະ ກໍໄດ້ຖືກນຳໃຊ້ໃນສະໄຫມເລີ່ມຕົ້ນແຫ່ງການ-ຂະຫຍາຍຕົວຂອງທຶນນິຍົມ, ໃນເມື່ອພວກນາຍທຶນໄດ້ຮັບຜົນກຳໄລຢ່າງຫລວງຫລາຍດ້ວຍການແກ່ຍາວວັນທຳງານກຳມະກອນອອກ. ຮູບການຊຳລະຄ່າແຮງງານດັ່ງກ່າວໄດ້ອຳນວຍຜົນປະໂຫຍດໃຫ້ແກ່ພວກນາຍທຶນເປັນຢ່າງດີ.ໃນ ເວລາຕໍ່ມາ ເມື່ອວັນທຳງານກຳມະກອນຖືກຈຳກັດດ້ວຍກົດຫມາຍແລ້ວ ການຊຳລະຄ່າແຮງງານຕາມຜົນຜະລິດກໍຖືກນຳໃຊ້ກັນຢ່າງກວ້າງຂວາງ. ຢູ່ໃນ ສະໄຫມປະຈຸບັນນີ້ ຍັງມີຮູບການການຊຳລະ<u>ຄ່າແຮງງານຕາມເວລາເຮັດ ວຽກແບບເບ້ຍເພີ່ມລາງວັນ</u> ທີ່ໄດ້ນຳໃຊ້ກັນຢູ່ໂດຍທົ່ວໆໄປ.

ການຂ້າມຜ່ານຈາກການຊຳລະຄ່າແຮງງານຕາມຜົນຜະລິດໄປສູ່ການ ຊຳລະຕາມເວລາເຮັດວຽກມີສາຍເຫດແນວໃດ ? ຕົວຈິງມີຢູ່ບ່ອນວ່າ ຢູ່ໃນ ອຸດສາຫະກຳທຶນນິຍົມ ສະໄຫມປະຈຸບັນຢູ່ໃນຂະແຫນງການຜະລິດຕ່າງໆໄດ້ນຳໃຊ້ລະບົບຕ່ອງໂສ້. ສິ່ງດັ່ງກ່າວນີ້ສະແດງໃຫ້ເຫັນວ່າຈັງຫວະການຜະລິດບໍ່ໄດ້ຂໍ້ນກັບກຳມະກອນເລີຍ ແຕ່ຫາກຖືກກຳນົດດ້ວຍຄວາມໄວຂອງຕ່ອງໂສ້ຫລື້ດ້ວຍຈຸດພິເສດທາງດ້ານເຕັກໂນໂລຢີການຜະລິດ. ບັນດາກຳມະກອນຍິ່ງຕ້ອງ ສຸມໃຊ້ແຮງງານຫລາຍຂໍ້ນໂດຍບໍ່ມີເບ້ຍເພີ່ມອັດຕາຄ່າແຮງງານຫຍັງເລີຍ.

ຮູບການຊຳລະຄ່າແຮງງານຕາມເວລາເຮັດວຽກ ແລະ ຮູບການ ຊຳລະຄ່າແຮງງານຕາມຜົນຜະລິດໄດ້ນຳໃຊ້ພ້ອມໆກັນທັງສອງຢ່າງຢູ່ຕາມໂຮງຈັກ - ໂຮງງານບາງແຫ່ງ. ຢູ່ໃນລະບອບທຶນນິຍົມຮູບການສອງຢ່າງນີ້ແມ່ນເປັນ ວິທີການເພີ່ມທະວີການຂູດຮີດຊົນຊັ້ນກຳມະກອນ.

ເພື່ອເພີ່ມຄຸນຄ່າສ່ວນເກີນຂໍ້ນນັ້ນ ພວກນາຍທຶນໄດ້ນຳໃຊ້ລະບົບ ຕ່ອງໂສ້ແບບຕ່າງໆໃນການຈັດຕັ້ງການຜະລິດແລະຄ່າແຮງງານ. ຈຸດປະສົງຂອງ ລະບົບດັ່ງກ່າວກໍເພື່ອບີບ ຄັ້ນເອົາແຮງງານຈາກກຳມະກອນໃນຊົ່ວເວລາໃດຫນຶ່ງ

ໃຫ້ໄດ້ຫລາຍເທົ່າທີ່ຈະທຳໄດ້. ລະບົບຕ່ອງໂສ້ອັດຕາຄ່າແຮງງານມີຫລາຍສິບ
ແບບທີ່ແຕກຕ່າງກັນ. ໜຶ່ງໃນຊຸມລະບົບດັ່ງກ່າວນີ້ ແມ່ນລະບົບຂອງ ໄທໂລ.
ລະບົບດັ່ງກ່າວໃສ່ຢູ່ຕາມນັກວິສະວະກອນອາເມລິກາໄທໂລ ແລະ ມີເນື້ອໃນ
ດັ່ງຕໍ່ໄປນີ້: ຢູ່ໃນໂຮງງານ ນາຍທຶນໄດ້ເລືອກເຟັ້ນເອົາກຳມະກອນ ຜູ້ທີ່ແຂງ
ແຮງ ແລະ ລະອຽດ ຄຽມຄົ້ມຜູ້ໜຶ່ງ ແລະ ກໍມອບໝາຍໃຫ້ເຂົາ ທຳງານ
ຢ່າງສຸດກຳລັງວັງຊາ. ຊົ່ວໂມງເວລາປະຕິບັດວຽກງານຂອງກຳມະກອນ ຜູ້ນັ
ໄດ້ຖືກຈັບກຳນົດເວລາດ້ວຍໂມງຈັບເວລາເປັນວິນາທີ ແລະ ສ່ວນວິນາທີ.ຕົວ
ເລກຂໍ້ມູນທີ່ໄດ້ຮັບມານັ້ນ ໄດ້ຖືກມອບໃຫ້ຄະນະກຳມະການພິເສດດ້ານເຕັກນິກ
ກວດກາ ແລະ ພາຍຫລັງການສຶກສາຄົ້ນຄວ້າແລ້ວ ຄະນະດັ່ງກ່າວກໍໄດ້ ວາງ
ກຳນົດລະບອບການຜະລິດ ແລະ ມາຕະຖານເວລາໃຫ້ແກ່ບັນດາກຳມະກອນ-
ໜົດທຸກຄົນ. ໃນທີ່ນີ້ ເພິ່ນໄດ້ວາງສອງລະດັບ ຄ່າແຮງງານຂັ້ນຕ່ຳ: ລະດັບທີ
ໜຶ່ງຄືລະດັບສູງໃຫ້ແກ່ຜູ້ທີ່ເຮັດຫລ້ອນໜ້າທີ່ "ບິດຮຽນ " ແລະລະດັບທີ່ສອງ
ຄືລະດັບຕ່ຳສຸດ ໃຫ້ແກ່ຜູ້ທີ່ເຮັດບໍ່ຫລ້ອນໜ້າທີ່ "ບິດຮຽນ" . ລະບົບຄ່າແຮງ
ງານດັ່ງກ່າວນີ້ໄດ້ເຮັດໃຫ້ສະມັດຖະພາບແຮງງານຖືບົ່ວສູງຂຶ້ນຢ່າງແຮງ ສ່ວນ
ງົບປະມານເງິນເດືອນຂອງກຳມະກອນເກືອບວ່າຈະບໍ່ມີອັນເພີ່ມຂຶ້ນເລີຍ. ອັນ
ນີ້ໝາຍເຖິງການກົດຂູດຮີດແຮງງານກໍ່ຍັງເພີ່ມທະວີຂຶ້ນ.

ລະບົບຕ່ອງໂສ້ອີກວິທີໜຶ່ງ ແມ່ນລະບົບ ຟອດ. ລະບົບດັ່ງກ່າວກໍມີຈຸດ ປະ
ສົງອັນດຽວກັນກັບລະບົບກອນຄີບໍ່ຄົ້ນເອົາປະໂຍນແຮງງານຈາກຄົນງານໃຫ
ໄດ້ຫລາຍຂຶ້ນກວ່າເກົ່າ. ສ່ວນດັ່ງກ່າວໄດ້ປະຕິບັດກັນແບບລະບົບຕ່ອງໂສ່ໃຫ້ໄວ
ຂຶ້ນ. ຕົວຢ່າງ, ແຕກອນຕ່ອງໂສ່ແລ່ນດ້ວຍຄວາມໄວ ນີ້ ແມັດຕໍ່ນາທີ ແຕ່ນາ
ບັດນີ້ ຕ້ອງໃຫ້ໄດ້ ๔-๕ ແມັດຕໍ່ນາທີ. ກຳມະກອນຈຳຕ້ອງສຸມແຮງງານຂອງ
ຕົນເຂົ້າໃສ່, ຕ້ອງສູນເສຍກຳລັງແຮງຫລາຍຂຶ້ນ ແຕ່ອັດຕາຄ່າແຮງງານຍັງຢູ່
ໃນລະດັບເດີ່ມ ແລະ ກໍ່ບໍ່ເໝາະສົມກັບເຫື່ອແຮງທີ່ສູນເສຍໄປເລີຍ. ການ
ນຳໃຊ້ລະບົບດັ່ງກ່າວນີ້ ກຳມະກອນຈຳນວນຫລວງຫລາຍເມື່ອອາຍຸໄດ້ ๔๐ -
๔๕ ປີກໍ່ອ່ອນເພຍໝົດເຫື່ອແຮງແລ້ວ ແລະ ເຈົ້າຂອງໂຮງງານກໍຈະຂັບໄລ-
ອອກຈາກງານໄປ.

ໃນເວລາດຽວກັນ ຄວາມສະດວກໃນການປະຕິບັດວຽກງານດ້ວຍ ລະບົບ
ຕ່ອງໂສ້ໄດ້ເຮັດໃຫ້ນາຍທຶນສາມາດນຳໃຊ້ແຮງງານກຳມະກອນສາມັນ ທຳມະ

ດາ ແລະ ວາງລະດັບອັດຕາຄ່າແຮງງານໃຫ້ພວກເຂົ້າເຈົ້າຕ່ຳກວ່າເກົ່າອີກ.

ຜົວພັນເຖິງລະບົບ ຕ່ອງໂສ້ອັດຕາຄ່າແຮງງານນັ້ນຍັງມີລະບົບ ປະກອບສ່ວນຢູ່ໃນພົນກຳໄລນຳອີກ. ໃນເມື່ອຈ່າງກຳມະກອນນັ້ນ ນາຍທຶນໄດ້ປະກາດວ່າ ຕົນຈະຈ່າຍຄ່າແຮງງານໃຫ້ກຳມະກອນຕ່ຳກວ່າພວກນາຍທຶນຄົນອື່ນ ແຕ່ວ່າໃນທຸກໆທ້າຍປີພາຍຫລັງກວດກາສະຫລຸບວຽກງານຂອງໂຮງງານແລ້ວ ບັນດາກຳມະກອນຜູ້ທີ່ຫາວທັນທຳງານດົນກໍໄດ້ຮັບສ່ວນໜຶ່ງຂອງກຳໄລຂອງໂຮງງານ.

ການນຳໃຊ້ລະບົບດັ່ງກ່າວນີ້ ກໍເພື່ອເພີ່ມທະວີແຮງງານສຸມ ແລະດຶງຈ່ອງການຂະຫຍາຍຕົວດ້ານຄວາມຕື້ນຕົວທາງດ້ານຈຸມຈຸ້ນກຳມະກອນ ແລະ ແບ່ງແຍກພາຍໃນກຳມະກອນເອງ. ລະບົບປະກອບສ່ວນຢູ່ພົນກຳໄລນີ້ໄດ້ສ້າງ ສິ່ງລວງຕາກຳມະກອນ ແລະ ເບິ່ງຄ້າຍກັບວ່າກຳມະກອນມີຄວາມສົນໃຈໃນການເພີ່ມພູນພົນກຳໄລໃຫ້ແກ່ໂຮງຈັກໂຮງງານທຶນນິຍົມ ແລະຍັງເຂົ້າໄປຂັດຂວາງການຕໍ່ສູ້ຂອງກຳມະກອນຕ້ານເຈົ້າຂອງໂຮງຈັກໂຮງງານນຳອີກ.

ອັດຕາຄ່າແຮງງານພົ້ນຖານ	ຢູ່ໃນໄລຍະການຂະຫຍາຍຕົວທຳອິດຂອງ
ແລະອັດຕາຄ່າຄອງຊີບ	ລະບອບທຶນນິຍົມ ຄົນງານບໍ່ຄ່ອຍ ໄດ້ຮັບ
	ຄ່າແຮງງານເປັນເງິນສົດເລີຍ. ໂດຍທຳ

ທະດາແລ້ວເພິ່ນໄດ້ເຮັດດັ່ງນີ້: ຢູ່ໃນໂຮງຈັກໂຮງງານທຶນນິຍົມໄດ້ມີຮ້ານ ຄ້າປະຈຳຂອງໂຮງງານທີ່ສົ່ງຄ້າສະບຽງແລະສົ່ງຄ້າອຸດສາຫະກຳ. ກຳມະກອນໄດ້ເບີກຮັບເອົາສົ່ງຄ້າໃນຮ້ານຄ້າດັ່ງກ່າວ ແລະ ໃນທ້າຍເດືອນຫລືທ້າຍລະດູນາຍທຶນຈະຕ້ອງຄິດໄລ່ຄືນ: ເຮັດວຽກໄດ້ເທົ່າໃດແລະເອົາສົ່ງຄ້າໄປ ແລວເທົ່າໃດ. ພາຍຫລັງການຄິດໄລ່ລະອຽດແລ້ວ ກຳມະກອນໄດ້ຮັບເງິນ ສົດໜ້ອຍທີ່ສຸດຫລືບໍ່ໄດ້ຮັບເລີຍກໍມີ. ໃນປະຈຸບັນ ການຊຳລະຄ່າແຮງງານ ເປັນອັດຖຸນີ້ກໍໄດ້ຖືກນຳໃຊ້ກັນຢ່າງກ້ວາງຂວາງຢູ່ຕາມບັນດາປະເທດທີ່ເສດຖະກິດຫລ້າຫລັງ. ຢູ່ໃນບັນດາປະເທດທຶນນິຍົມຂະຫຍາຍຕົວສະໄໝປະຈຸບັນຮູບການຄ່າແຮງງານ ແມນເປັນຄ່າແຮງງານດ້ວຍເງິນສົດ.

ຄ່າແຮງງານທີ່ສະແດງອອກເປັນເງິນສົດນັ້ນ ເພິ່ນເອີ້ນວ່າ ຄ່າແຮງງານພົ້ນຖານ. ແຕ່ວ່າຄ່າແຮງງານພົ້ນຖານນີ້ບໍ່ສາມາດສະແດງໃຫ້ເຫັນເຖິງລະດັບ

ການໃຊ້ຈ່າຍຕົວຈິງຂອງການຜະລິດ. ເພື່ອໄຈ້ແຍກເບິ່ງລະດັບຕົວຈິງດັ່ງ
ກ່າວຈະຕ້ອງຮູ້ຄ່າຄອງຊີບເສຍກ່ອນ.ອັດຕາ<u>ຄ່າຄອງຊີບ</u>ແມ່ນຄ່າແຮງງານທີ່ສະ
ແດງໃຫ້ເຫັນວັດຖຸທີ່ເປັນປັດໄຈຄໍ້ລຶງຊີວິດຂອງການຜະລິດ. ອັດຕາຄ່າຄອງຊີບ
ສະແດງໃຫ້ເຫັນວ່າເງິນທີ່ໄດ້ມາຈາກ ການຮັດວຽກອອກແຮງງານນັ້ນການ
ຜະລິດສາມາດຊື້ປັດໄຈຄໍ້ລຶງຊີວິດໄດ້ຫລາຍປານໃດແລະໄດ້ຫຍັງແດ່ເພື່ອຕົ້ມ
ແລະ ຄອບຄົວນໍາອີກ.

ໃນການກໍານົດອັດຕາຄ່າຄອງຊີບນັ້ນຈະຕ້ອງນັບທັງ: ບໍລິມາດລວມ
ຂອງຄ່າແຮງງານພົ້ນຖານ, ລາຄາວັດຖຸອຸປະໂພກ ແລະ ບໍລິການຕ່າງໆ, ບໍລິມາດ
ເສຍອວຍ, ການຊໍາລະຄ່າເຊົ່າເຮືອນ ແລະ ການຊໍາລະສະສາງອື່ນໆອີກ .
ໃນຂະນະທີ່ລະບອບທຶນນິຍົມຂະຫຍາຍຕົວນັ້ນ ອັດຕາຄ່າຄອງຊີບມີທ່າອຽງໄປສູ່
ການຂຸດໂອມຕົກຕໍ່ລຶງໄປເລື້ອຍໆ.

ຢູ່ໃນລະບອບທຶນນິຍົມ ການຕົກຕໍ່ຂອງຄ່າຄອງຊີບພົວພັນກັບຫລາຍ ສາຍ
ເຫດດ້ວຍກັນ. ໜຶ່ງໃນສາຍເຫດເຫລົ່ານັ້ນແມ່ນລາຄາສິນຄ້າສູງ. ສົມມຸດວ່າ
ອັດຕາຄ່າຈ້າງພົ້ນຖານຂອງການຜະລິດໄດ້ເພີ່ມສູງຂຶ້ນ. ແຕ່ຖ້າວ່າລາຄາ ສິນ
ຄ້າຫາກຖືບຕົວສູງຂຶ້ນຫລາຍກວ່າຄ່າແຮງງານ ນັກທຶນຍ່ອມວ່າການຜະລິດ
ສາມາດຊື້ສິນຄ້າໄດ້ໜ້ອຍລົງ ກໍຄືຄ່າຄອງຊີບຕົກຕໍ່ລົງນັ້ນເອງ. ປະຈຸບັນ ຢູ່
ໃນປະເທດທຶນນິຍົມຕ່າງໆ ໄດ້ເກີດມີສະພາບດັ່ງນີ້: ລາຄາສິນຄ້າຖືບຕົວ ສູງ
ຂຶ້ນໄວກວ່າຄ່າແຮງງານ. ເວົ້າລວມກໍຄືຄ່າຄອງຊີບແພງຂຶ້ນ. ເຊັ່ນ, ຢູ່ສະ-
ຫະລັດອາເມລິກາພາຍໃນ ໑໐ ປີຜ່ານມານີ້ ຄ່າຄອງຊີບສູງຂຶ້ນ ๔ ເທື່ອ, ຢູ່
ປະເທດອັງກິດ-๔ ເທື່ອ. ໃນຕະຫລອດຊຸມປີ ๑๙๗๐ ຢູ່ອາເມລິກາ ລາຄາ
ສິນຄ້າອຸປະໂພກສູງຂຶ້ນ ๗๗%, ອັດຕາຄ່າໂດຍສານພາຍໃນຕົວເມືອງເພີ່ມຂຶ້ນ ๕
ເທື່ອພາຍໃນ ๔๐ ປີຜ່ານມານີ້. ໃນປີ ๑๙๒๐ ຊຸມຄ່າອຸປະໂພກ ๑ ໂດລາ-
ອາເມລິກາເທົ່າກັບ ๗๒ ເຊັ່ນ "ສະໄໝ" ປີ ๑๙๒๐.

ສາຍເຫດອີກອັນໜຶ່ງທີ່ເຮັດໃຫ້ຄ່າຄອງຊີບຕົກຕໍ່ແມ່ນການເພີ່ມສູງ ການ
ເກັບສ່ວຍ ແລະ ການຊໍາລະໃຊ້ຈ່າຍອື່ນໆ (ຄ່າເຊົ່າເຮືອນ, ອາຍແກັດ, ໄຟ
ຟ້າ, ນໍ້າ ແລະອື່ນໆ). ການຖືບຕົວຂຶ້ນສູງຂອງການໃຊ້ຈ່າຍເຫລົ່ານີ້ ໄດ້ນັ້ນ
ທອນຄ່າແຮງງານລົງ ແລະສຸດທ້າຍຄ່າຄອງຊີບກໍຕົກຕໍ່. ເຊັ່ນຢູ່ອາເມລິກາ,
ເມື່ອງຈາກໄພເງິນເຟີ້ພາຍໃນ ๕ ປີຜ່ານມານີ້ ລາຍໄດ້ປະຈໍາວັນຂອງການ

ກອນອາເມລິກາຫລຸດລົງ ๕%, ການເກັບພາສີນຳເຂົ້າຄ້ອຍຂະໜາດກາງ ໄດ້ເພີ່ມສູງຂຶ້ນ ๓๗%. ສາຍເຫດອັນສຳຄັນທີ່ພາໃຫ້ລາຄາຂອງຊິ້ນຂອງກຳມະ ກອນຕົກຕ່ຳລົງນັ້ນ ແມ່ນມາຈາກການຫັກ ແລະ ປັບໃໝໃນໄລຍະທຳການຜະລິດ.

ສະພາບການດັ່ງກ່າວໄດ້ເຮັດໃຫ້ລາຄາຂອງຊິ້ນຂັ້ນກຳມະກອນຕົກຕ່ຳລົງຢູ່ໃນລະບອບທຶນນິຍົມ.

ນອກນີ້ຢູ່ໃນບັນດາປະເທດທຶນນິຍົມຕ່າງໆ ຍັງມີຄວາມບໍ່ສະເໝີພາບ ໃນການໃຫ້ລາແຮງງານ ລະຫວ່າງຜູ້ຊາຍ ແລະ ແມ່ຍິງນຳອີກ. ຄົນງານແມ່ຍິງໄດ້ຮັບຄ່າແຮງງານຕ່ຳກວ່າຜູ້ຊາຍຫລາຍເທົ່າຫ້ຽງໆທັ້ງໜ້າທີ່ແລະໜ້າທີ່ວຽກງານ ຢ່າງດຽວກັນ. ໃນຕອນຕົ້ນຊຸມປີ ๑๙๒๐ ຢູ່ຕາມບັນດາປະເທດທຶນນິຍົມຄ່າ ແຮງງານປານກາງໄດ້ຫລຸດຕ່ຳລົງກວ່າ ๕๗% ແລະໃນນັ້ນຢູ່ສະຫະລັດອາເມລິກາ-๔๐%, ຢູ່ຝະລັ່ງ-๓๕% ແລະຍີ່ປຸ່ນ-๑,๕ ເທົ່າ. ຄວາມແຕກຕ່າງກັນຢູ່ໃນອັດຕາຄ່າແຮງງານລະຫວ່າງຜູ້ຊາຍ ແລະແມ່ຍິງໄດ້ເຮັດໃຫ້ພວກນາຍທຶນມີເງິນກຳໄລເພີ່ມເຕີມສູງຂຶ້ນ.

ການຈຳ ແນກຜິວພັນແມ່ນບໍ່ເກີດເງິນກຳໄລອັນມະຫາສານຂອງພວກ ນາຍທຶນ. ເຊັ່ນຢູ່ສະຫະລັດອາເມລິກາ ກຳມະກອນຜິວດຳໄດ້ເຮັດວຽກດ້ວຍເງື່ອນໄຂແຮງງານລຳບາກກວ່າກຳມະກອນຜິວຂາວ. ພວກເຂົາເຈົ້າຖືກນຳໃຊ້ເຂົ້າເຮັດວຽກງານທີ່ຫຍຸ້ງຍາກແບບສ່ຽງໄພ ແລະ ທຳລາຍສຸຂະພາບ. ແຮງງານຂອງກຳມະກອນຜິວດຳຈະຖືກຈ່າງດ້ວຍລາຄາຕ່ຳກວ່າແຮງງານຂອງຊາວ ຜິວຂາວຫລາຍເທົ່ຍ. ຢູ່ສະຫະລັດອາເມລິກາ ອັດຕາຂະໜາດປານກາງຂອງຄອບຄົວຄົນຜິວດຳມີພຽງແຕ່ ๕๔% ຂອງອັດຕາຄອບຄົວເຊື້ອຊາດຊາວເອີລົບ.

ຢູ່ຕາມບັນດາປະເທດເອີລົບຕາເວັນຕົກ ກຳມະກອນຕ່າງດ້າວຍັງຖືກ ຈຳແນກຄ່າແຮງງານເຊັ່ນດຽວກັນ. ກຳມະກອນຕ່າງດ້າວໄດ້ຮັບອັດຕາ ຄ່າແຮງງານໜ້ອຍທີ່ສຸດ. ພວກເຂົາເຈົ້າຍິ່ນຍອມເຮັດໜຸກວຽກ ລວມທັ້ງວຽກທີ່ ໜັກໜ່ວງຄ່າຈ່າງຕ່ຳກໍດີ ຍອມວ່າພວກເຂົາເຈົ້າບໍ່ສາມາດຫາວຽກດ້ວຍກ່ວ່ານີ້ໄດ້ຢູ່ພາຍໃນປະເທດຂອງຕົນ.

ແຮງງານແມ່ຍິງ, ແຮງງານກຳມະກອນຕ່າງດ້າວ, ການຈຳແນກຜິວພັນ ທັ້ງໝົດນີ້ໄດ້ສ້າງເງື່ອນໄຂສະດວກໃຫ້ແກ່ພວກນາຍທຶນຫລາຍໄດ້ເພີ່ມ ທະວີ ມາຕະຖານຊຸມຄ່າສ່ວນເກີນຂຶ້ນຢ່າງຫລວງຫລາຍ.

ຢູ່ຕາມບັນດາປະເທດທຶນນິຍົມຕ່າງໆ ລະດັບຄ່າແຮງງານກຳມະກອນ ມີ
ອັນແຕກຕ່າງກັນ ແລະ ມາຈາກຫລາຍສາຍເຫດ. ເຫັນວ່າບໍ່ຖືກຕ້ອງເລີຍຖ້າ
ຫາກຖືວ່າຢູ່ໃນປະເທດນຶ່ງພວກນາຍທຶນມີຄວາມເມດຕາກະລຸນາຕໍ່ກຳມະກອນ -
ຫລາຍກວ່າຢູ່ປະເທດອື່ນ. ຍາມໃດພວກນາຍທຶນກໍມີຄວາມພະຍາຍາມ ຢາກ
ຫລຸດຄ່າແຮງງານຕ່ຳທີ່ສຸດເທົ່າທີ່ຈະທຳໄດ້. ແຕ່ວ່າໃນເມື່ອສົມທຽບເບິ່ງ ລະ
ດັບຄ່າແຮງງານຢູ່ຕາມບັນດາປະເທດຕ່າງໆນັ້ນ ຈະຕ້ອງຄຳນຶງເຖິງເງື່ອນໄຂ
ທາງປະຫວັດສາດໃນການກຳເນີດການເຕົ້າໂຮມ ຊຸມຊຸ້ມກຳມະກອນ ແລະລະ
ດັບຄວາມຮຽກຮ້ອງຕ້ອງການຂອງຊຸມຊຸ້ມກຳມະກອນ, ການໃຊ້ຈ່າຍຕ່າງໆໃນ
ການກໍ່ສ້າງພະນັກງານ, ສະມັດຖະພາບແຮງງານ, ການຕໍ່ສູ້ຊຸມຊຸ້ມ ແລະ
ເງື່ອນໄຂອື່ນໆທີ່ກ່ຽວພັນກັບປະເທດນັ້ນ.

ຕົວຢ່າງ, ຢູ່ໃນສະຫະລັດອາເມລິກາ ລະບອບທຶນນິຍົມໄດ້ຂະຫຍາຍຕົວຢູ່
ໃນສະພາບທີ່ຈຳນວນກຳມະກອນບໍ່ພຽງພໍຈຶ່ງເຮັດໃຫ້ຄ່າແຮງງານມີອັດຕາ ສູງ
ອັນໄດ້. ຢູ່ປະເທດອັງກິດ, ຊຸມຊຸ້ມກຳມະກອນໄດ້ກຳເນີດຂຶ້ນກ່ອນຢູ່ໃນບັນດາ
ປະເທດເອີລົບອື່ນໆ ແລະ ໄດ້ທຳການຕໍ່ສູ້ຕ້ານພວກນາຍທຶນຢ່າງເຂັ້ມແຂງ .
ຈາກສາຍເຫດດັ່ງກ່າວນີ້ ຄ່າແຮງງານຂອງກຳມະກອນຢູ່ທີ່ປະເທດອັງກິດ ຈຶ່ງ
ສູງກວ່າເຊັ່ນຢູ່ປະເທດອຽກລັ່ງ. ສະພາບການເຫລົ່ານີ້ໄດ້ເຮັດໃຫ້ລະດັບ ຄ່າ
ແຮງງານພາຍໃນປະເທດຕ່າງໆມີອັນແຕກຕ່າງກັນ.

ການຕໍ່ສູ້ຂອງຊຸມຊຸ້ມກຳມະກອນເພື່ອຍົກອັດຕາຄ່າແຮງງານໃຫ້ສູງຂຶ້ນ

ຍາມໃດພວກນາຍທຶນກໍມີຈຸດ ປະສົງຢາກຫລຸດລາຍໄດ້ຂອງກຳມະກອນລົງ ແລະກໍພະຍາຍາມວາງ
ອັດຕາຄ່າແຮງງານພຽງແຕ່ໃຫ້ພໍມີຊີວິດຢູ່ເທົ່ານັ້ນ. ທັງຫມົດນີ້ກໍເພື່ອວ່າ ນາຍ
ທຶນຈະສາມາດມີກຳໄລຫລາຍຂຶ້ນ. ພວກນາຍທຶນໄດ້ສວຍໃຊ້ລັດ, ກົດໝາຍ,
ສາສະໜາ, ວັທະຍຸ, ໜັງສືພິມ ແລະ ອື່ນໆເພື່ອຕ້ານກັບຊຸມຊຸ້ມກຳມະກອນ
ນອກຈາກນີ້ ພວກນາຍທຶນເອງກໍຍັງໄດ້ເຕົ້າໂຮມກັນເຂົ້າເປັນພັນທະພາບ ລະ
ຫວ່າງເຈົ້າໂຮງງານດ້ວຍກັນ ແລະ ກໍພ້ອມກັນລຸກຮືຂຶ້ນຕ້ານກັບບັນດາ ກຳມະ
ກອນຢ່າງເປັນເອກະພາບກັນ.

ເພື່ອທຳການຕໍ່ສູ້ຕ້ານຄືນ ຊຸມຊຸ້ມກຳມະກ້ອນກໍພາກັນເຕົ້າໂຮມກັນ ເຂົ້າ

ເປັນສະຫະພັນກຳມະບານ ຊຶ່ງໄດ້ຈັດຕັ້ງຊົນຊັ້ນກຳມະກອນທຳການຕໍ່ສູ້ເພື່ອປັບປຸງສະພາບເສດຖະກິດຂອງຕົນໃຫ້ດີຂຶ້ນ. ຢູ່ໃນການຕໍ່ສູ້ດັ່ງກ່າວນີ້ ຊາວຜູ້ອອກແຮງງານໄດ້ຮຽກຮ້ອງເຊັ່ນ: ຂຶ້ນອັດຕາຄ່າແຮງງານ, ປັບປຸງເງື່ອນໄຂແຮງງານ, ຮັບປະກັນວຽກງານ ແລະ ອື່ນໆ.

ຈາກຜົນການຕໍ່ສູ້ຊົນຊັ້ນກັນຢ່າງດຸເດືອດລະຫວ່າງຊາວກຳມາຊີບແລະພວກນາຍທຶນນີ້ກໍໄດ້ມີການວາງກຳນົດລະດັບອັດຕາຄ່າແຮງງານຂຶ້ນຈຳນວນຫນຶ່ງ . ບ່ອນໃດທີ່ບັນດາກຳມະກອນໄດ້ມີການຈັດຕັ້ງຕໍ່ສູ້ຢ່າງເດັດດ່ຽວໂດຍການນັດຢຸດງານ, ບ່ອນນັ້ນພວກນາຍທຶນກໍຈຳຕ້ອງຍິນຍອມຮັບເອົາເງື່ອນໄຂຂອງ ກຳມະກອນສ່ວນໃດສ່ວນຫນຶ່ງ ແລະ ຂຶ້ນອັດຕາຄ່າແຮງງານໃຫ້ພວກເຂົາເຈົ້າ. ໃນປະຈຸບັນນີ້ ການຕໍ່ສູ້ຂອງ**ຊົນຊັ້ນກຳ**ມະກອນເພື່ອປັບປຸງເງື່ອນໄຂຊີວິດການເປັນຢູ່ຂອງຕົນໄດ້ແຜ່ລາມອອກເປັນຂະບວນໃຫຍ່ຢູ່ຕາມປະເທດທຶນນິຍົມ ຂະຫຍາຍຕົວເຊັ່ນ, ສະຫະລັດອາເມລິກາ, ອັງກິດ, ຝະລັ່ງ, ສະຫະພັນເຢຍລະມັນ, ອີຕາລີ ແລະອື່ນໆ.

ຂະບວນການນັດຢຸດງານໃນຊຸມປີຫລັງໆມານີ້ ໄດ້ສະແດງໃຫ້ເຫັນເຖິງລະດັບຄວາມຕົນຕົວທາງຊົນຊັ້ນ ແລະ ລະດັບການຈັດຕັ້ງຂອງຊາວຜູ້ອອກແຮງ - ງານ, ຂໍ້ຮຽກຮ້ອງຢ່າງຮອບດ້ານ, ຂະບວນລຸກຮື້ຂອງຊາວຜູ້ອອກແຮງງານ-ທຸກຊັ້ນຄົນ, ການຜູກແຫນ້ນການຕໍ່ສູ້ດ້ານການເມືອງ ແລະດ້ານເສດຖະກິດ . ເຫດການຕ່າງໆໃນໄລຍະຫລັງໆນີ້ໄດ້ຢັ້ງຢືນໃຫ້ເຫັນວ່າຊົນຊັ້ນກຳມະກອນ ໄດ້ກາຍເປັນກຳລັງນຳຫນ້າແລະກຳລັງຕັດສິນອັນສຳຄັນຂອງການຕໍ່ສູ້ປະຕິວັດແລະເປັນກຳລັງຂອງຫມົດທຸກຂະບວນການປະຊາທິປະໄຕຕ້ານລະບອບຈັກກະພັດ ນິຍົມ.

ການຕໍ່ສູ້ດ້ານເສດຖະກິດຂອງຊາວກຳມາຊີບແມ່ນມີຄວາມຫມາຍຢ່າງໃຫຍ່ຫລວງແລະມີຄວາມສຳຄັນທີ່ສຸດ. ແຕ່ວ່າລັດທິມາກ-ເລນິນ ໄດ້ບອກວ່າລຳພັງແຕ່ການຕໍ່ສູ້ດ້ານເສດຖະກິດຢ່າງດຽວຈະບໍ່ສາມາດປົດປ່ອຍກຳມະກອນ ອອກຈາກການກົດຂີ່ຂູດຮີດໄດ້. ມີແຕ່ການລົບລ້າງແບບວິທີການຜະລິດທຶນນິຍົມດ້ວຍການຕໍ່ສູ້ປະຕິວັດດ້ານການເມືອງເທົ່ານັ້ນ ຈຶ່ງຈະລົບລ້າງທຸກເງື່ອນໄຂການກົດຂີ່ຂູດຮີດຊົນຊັ້ນກຳມະກອນ ທາງດ້ານເສດຖະກິດ ກໍຄືດ້ານການເມືອງລົງໄດ້.

ຄຳຖາມເພື່ອທວນຄືນ

๑. ເນື້ອໃນການສະສົມເບື້ອງຕົ້ນມີຄຸນແນວໃດ ?
๘. ຫລັກການລວມຂອງທຶນຄຸ້ມແນວໃດ ແລະ ມັນມີຄວາມແຕກຕ່າງຈາກຫລັກ-ການການຫມູນວຽນສິນຄ້າແນວໃດ ?
๓. ຈົ່ງໃຫ້ລາຍລະອຽດກ່ຽວກັບແຮງງານຄົນທີ່ກາຍເປັນສິນຄ້າ.
๔. ການກົດຂີ່ຂູດຮີດຂອງທຶນນິຍົມຄຸ້ມແນວໃດ ?
๕. ໂມງເວລາທຳງານຕົ້ນຕໍແລະ ໂມງເວລາທຳງານສ່ວນເກີນແມ່ນຫຍັງ?
๖. ທາດແທ້ ທຶນແມ່ນຢູ່ບ່ອນໃດ ?
๗. ການແບ່ງແຍກ ທຶນອອກເປັນທຶນຄົງທີ່ແລະທຶນຫມູນວຽນແມ່ນອີງໃສ່ພື້ນຖານຫຍັງ ?
๘. ລະດັບການກົດຂີ່ຂູດຮີດແຮງງານກຳມະກອນຈະກຳນົດໄດ້ຄຸ້ມແນວໃດ ?
๙. ວິທີການເພີ່ມທະວີລະດັບການກົດຂີ່ຂູດຮີດແຮງຄົນມີຫຍັງແດ່ ແລະເນື້ອໃນຂອງມັນແມ່ນຢູ່ບ່ອນໃດ ?
๑๐. ຈົ່ງໃຫ້ລາຍລະອຽດກ່ຽວກັບສາມໄລຍະແຫ່ງການຂະຫຍາຍຕົວຂອງ ລະບອບທຶນນິຍົມຢູ່ໃນຊຸດສາທະກຳດ້ວຍ.
๑๑. ຂໍ້ຂັດແຍ່ງຕົ້ນຕໍຂອງລະບອບທຶນນິຍົມແມ່ນຢູ່ບ່ອນໃດ ແລະ ສາຍເຫດ - ຂອງການກຳເນີດຂໍ້ຂັດແຍ່ງຄືອັນໃດ ?
๑๒. ດ້ວຍເຫດໃດ ອັດຕາຄ່າແຮງງານຢູ່ລະບອບທຶນນິຍົມຈຶ່ງປົກປິດການ ກະທຳການກົດຂີ່ຂູດຮີດຊຸ້ມຊັ້ນກຳມະກອນ ?
๑๓. ຈົ່ງໃຫ້ລາຍລະອຽດກ່ຽວກັບຮູບການຕົ້ນຕໍຂອງອັດຕາຄ່າແຮງງານ.
๑๔. ອັດຕາຄ່າແຮງງານພື້ນຖານແລະອັດຕາຄ່າຄອງຊີບແມ່ນຫຍັງ ?
๑๕. ການຕໍ່ສູ້ດ້ານເສດຖະກິດຂອງຊຸ້ມຊັ້ນກຳມະກອນມີຜົນສະທ້ອນຕໍ່ ລະດັບອັດຕາຄ່າແຮງງານຄຸ້ມແນວໃດ ?

ພາກ ສີ

ການສະສົມທຶນ ແລະ
ການຂຸດໂຊມສະພາບການເປັນຢູ່ ຂອງຊາວກຳມາຊີບ

ພວກເຮົາໄດ້ອະທິບາຍແຈ້ງແລ້ວວ່າ ລຸນຄ່າສ່ວນເກີນເກີດຂຶ້ນຍ້ອນ ທຶນ. ແຕ່ວ່າທຶນເອງກໍເກີດມາຈາກລຸນຄ່າສ່ວນເກີນ. ມັນເປັນໄປໄດ້ແນວໃດ ? ເພື່ອຈະໃຫ້ຄຳຕອບຕໍ່ບັນຫານີ້ ຈະຕ້ອງທຳຄວາມຮູ້ຈັກກັບກົນໄກການຜະລິດສຳ ແບບທຶນນິຍົມເສຍກ່ອນ.

๑. ການສະສົມທຶນແລະການກຳເນີດຂອງ ໄພຫວ່າງງານ

ການຜະລິດສຳແລະ ການສະສົມທຶນ

ໃນເມື່ອກ່າວເຖິງການຜະລິດ ກໍແມ່ນ ໝາຍ-ເຖິງຂະບວນການຜະລິດວັດຖຸສິ່ງຂອງ.ຢູ່ໃນລະ ບອບທຶນນິຍົມ ເຈົ້າຂອງໂຮງງານໄດ້ຊື້ ອຸປະ ກອນການຜະລິດ,ແຮງງານຄົນແລະຈາກນັ້ນວັດຖຸສິ່ງຂອງກໍຈະປະກົດ ເກີດຂຶ້ນ ດ້ວຍເຫື່ອແຮງການຜະລິດຂອງມະນຸດເອງ. ນີ້ຄືຂະບວນການຜະລິດ. ແຕ່ວ່າ ສັງຄົມບໍ່ສາມາດຢຸດຕິການຜະລິດໄດ້ກ່ອນວ່າ ການຢຸດຕິການຜະລິດວັດຖຸ ສິ່ງ ຂອງຄືການລົ້ມລະລາຍຂອງສັງຄົມ. ສະນັ້ນ ຂະບວນການຜະລິດວັດຖຸສິ່ງຂອງ ຈະຕ້ອງເຮັດຢ່າງຕໍ່ເນື່ອງກັນໂດຍບໍ່ມີຢຸດເຊົ່າ. ຂະບວນການຜະລິດວັດຖຸສິ່ງ ຂອງແບບສືບຕໍ່ຫວນຄືນຊ້ຳເຕີມກັນນີ້ເພີ້ນເອີ້ນວ່າ <u>ກຸ່ນຜະລິດສຳ.</u>

ຂະບວນການຜະລິດສຳມີຢູ່ໃນທຸກໆສັງຄົມ ແຕ່ວ່າຈຸດປະສົງຂອງການ ຜະ ລິດສຳ ພັດມີອັນແຕກຕ່າງກັນ. ຢູ່ໃນລະບອບທຶນນິຍົມ ຈຸດປະສົງຂອງການຜະ

ລິດສຳແມ່ນການຍາດຊິງຄຸນຄ່າສ່ວນເກີນໂດຍພວກນາຍທຶນ. ວັດຖຸສິ່ງຂອງ ທີ່ຖືກຜະລິດ ແລະ ຖືກຜະລິດສຳນັ້ນ ບໍ່ແມ່ນເພື່ອຕອບສະໜອງຄວາມຕ້ອງການ ຂອງຊາວຜູ້ອອກແຮງງານເລີຍ ແຕ່ຫາກເພື່ອນາຍທຶນຈະໄດ້ຮັບໜາກຜົນ ກຳ ໄລຕ່າງຫາກ.

ຢູ່ໃນຂະບວນການຜະລິດສຳແບບທຶນນິຍົມນັ້ນ ຄຸນຄ່າສ່ວນເກີນທີ່ໄດ້ຮັບມາ ຈະຕົກເປັນກຳມະສິດຂອງນາຍທຶນເອງ. ພວກເຮົາສົນໃຈຢາກຮູ້ບໍ່ພຽງ ແຕ່ ການກອບໂກຍຄຸນຄ່າສ່ວນເກີນເທົ່ານັ້ນ ແຕ່ຢາກຮູ້ລວມທັງການນຳໃຊ້ຄຸນ ຄ່າ ສ່ວນເກີນນຳອີກ. ຖ້າວ່າຄຸນຄ່າສ່ວນເກີນທັງໝົດຫາກຖືກໃຊ້ຈ່າຍໂດຍ ນາຍ ທຶນເພື່ອການຊົມໃຊ້ສ່ວນຕົວແລ້ວ ເມື່ອນັ້ນ ການຜະລິດສຳກໍຈະເປັນພຽງແບບ ເຊິງດຽວເທົ່ານັ້ນ. ຍົກຕົວຢ່າງ, ນາຍທຶນໄດ້ລົງທຶນລ່ວງໜ້າ ๔๐๐ ພັນໂດ ລ່າໃນນັ້ນທຶນຄົງທີ່-๑๒๐ ພັນ ແລະທຶນປ່ຽນ-๔๐ ພັນ. ຄ່ອຍມາຕະຖານ ຄຸນ ຄ່າສ່ວນເກີນເຕັມອັດຕາສ່ວນ ๑๐๐% ການຜະລິດຈະຕ້ອງໃຫ້ໄດ້ ๘๔๐ ພັນ ໂດລ່າ. ໃນທຶນທຶນຄົງທີ່ທັ້ງໝົດຈະເຂົ້າປະກອບຢູ່ໃນຄຸນຄ່າຜົນຜະລິດ(๑๒๐ ພັນ c + ๔๐ ພັນ v + ๔๐ ພັນ m = ๘๔๐ ພັນ). ເງິນຈຳນວນ ๘๔๐ ພັນໂດລ່ານີ້ໄດ້ປະກອບດ້ວຍຕົ້ນທຶນໃນວົງເງິນ ๘๐๐ ພັນໂດລ່າ ແລະ ສ່ວນອີກ ๔๐ ພັນໂດລ່ານັ້ນແມ່ນຄຸນຄ່າສ່ວນເກີນທີ່ສ້າງຂຶ້ນໂດຍແຮງງານ ກຳ ມະກອນໃນໄລຍະການຜະລິດ.

ພາຍໃຕ້ການຜະລິດສຳ ແບບເຊິງດຽວຄຸນຄ່າສ່ວນເກີນທັງໝົດຈະຕົກໄປ ເປັນບ່ອງຊົມໃຊ້ສ່ວນຕົວຂອງນາຍທຶນແລະຄອບຄົວຂອງມັນ. ສະນັ້ນຂະບວນ- ການຜະລິດໃນປີໜ້າກໍຈະທຳການຜະລິດຄືນດ້ວຍບໍລິມາດເທົ່າຕົວແລະໃນປີຕໍ່ໆ ໄປກໍຈະດຳເນີນເຊັ່ນດຽວກັນນີ້ອີກ. ເຖິງແມ່ນວ່າຂະບວນການຜະລິດວັດຖຸສິ່ງ ຂອງຢູ່ໃນການຜະລິດສຳແບບເຊິງດຽວຈະທຳການຜະລິດຄືນດ້ວຍບໍລິມາດເດີມ ກໍຕາມ ແຕ່ພວກເຮົາກໍເຫັນໄດ້ເຖິງບໍ່ເກີດແຫ່ງຄວາມຮັ່ງມີຂອງພວກນາຍທຶນ.

ຢູ່ໃນຂະບວນການຜະລິດສຳ ໄດ້ມີການຜະລິດສຳ ທັງຕົ້ນທຶນ ແລະ ການ ສ້າງຄຸນຄ່າສ່ວນເກີນ ຊຶ່ງນາຍທຶນຈະນຳເອົາໄປໃຊ້ຈ່າຍເພື່ອການຊົມໃຊ້ສ່ວນ ຕົວ.

ຖ້າຫາກວ່ານາຍທຶນບໍ່ກຳຄຸນຄ່າສ່ວນເກີນໄວ້ ເມື່ອນັ້ນຕົ້ນທຶນທັງໝົດ ຈະ ຖືກໃຊ້ຈ່າຍໝົດໄປພາຍໃນຊ່ວໄລຍະໃດໜຶ່ງ. ຂໍຍົກຕົວຢ່າງວ່າ ທຸກໆປີນາຍ

ທຶນໃຊ້ຈ່າຍປີລະ ๔๐ ພັນໂດລາ ແລະ ມີຕົ້ນທຶນ ๘๐๐ ພັນໂດລາ, ເມື່ອນັ້ນ ພາຍໃນກຳນົດ ຫ້າປີ ນາຍທຶນກໍຈະບໍ່ມີຫຍັງຄ້າງຄາມືເລີຍ. ແຕ່ວ່າສິ່ງດັ່ງ - ກ່າວນີ້ຈະເກີດຂຶ້ນໄດ້ ເພາະວ່າຈຳນວນເງິນທີ່ນາຍທຶນໃຊ້ຈ່າຍ ເພື່ອ ການຊຶ່ມໃຊ້ສ່ວນຕົວນັ້ນແມ່ນລຸນຄ່າສ່ວນເກີນທີ່ໄດ້ມາລ້າໆຈາກແຮງງານ ຂອງ ກຳມະກອນ.

ບໍ່ເກີດເບື້ອງຕົ້ນຂອງຕົ້ນທຶນ ຈະເກີດຂຶ້ນໃນທຳນອງໃດກໍດີ ແຕ່ໃນ ຊ່ວງ ການຜະລິດສຳເລັ່ງດ້ວຍແບບທຶນນິຍົມ ນັ້ນ ຜ່ານໄລຍະໃດໜຶ່ງ ທຶນດັ່ງກ່າວ- ຈະກາຍເປັນລຸນຄ່າຊຶ່ງໄດ້ມາຈາກແຮງງານກຳມະກອນແລະກໍຈະຖືກກອບໂກຍ ໂດຍນາຍທຶນ.

ຈາກນີ້ ພວກເຮົາຈຶ່ງໄດ້ເຫັນເຫດຜົນທີ່ສຳຄັນຢ່າງໜຶ່ງຄືໃນໄລຍະ ເຣັດ ການປະຕິວັດສັງຄົມນິຍົມ ກຳມະສິດຂອງພວກນາຍທຶນ, ໂຮງຈັກໂຮງງານຈະ ຖືກຍຶດໂດຍຊົນຊັ້ນກຳມະກອນ. ທຸກສິ່ງທຸກຢ່າງທີ່ປະກອບສ້າງຂຶ້ນດ້ວຍ ແຮງ ງານຊົນຊັ້ນກຳມະກອນກໍຈະກັບກາຍມາເປັນກຳມະສິດຂອງຊົນຊັ້ນກຳມະກອນ- ເອງ. ດັ່ງນັ້ນ ການລົບລ້າງລະບອບກຳມະສິດສ່ວນຕົວແບບທຶນນິຍົມແມ່ນການ ກະທຳທີ່ຖືກຕ້ອງແລະເປັນທຳທີ່ສຸດ.

ພວກເຮົາໄດ້ເວົ້າແລ້ວວ່າ ນາຍທຶນຈະໃຊ້ຈ່າຍລຸນຄ່າສ່ວນເກີນ ທັງໝົດ ສຳລັບສ່ວນຕົວ. ແຕ່ວ່າສະພາບດັ່ງກ່າວ ຈະເປັນໄປໄດ້ໂດຍສະເໝີໄປບໍ ? ຢູ່ໃນສະໄໝການຂະຫຍາຍຕົວເບື້ອງຕົ້ນຂອງລະບອບທຶນນິຍົມນັ້ນ ສະພາບ - ການດັ່ງກ່າວນີ້ແມ່ນມີຢູ່ເລື້ອຍໆ. ໃນເວລານັ້ນນາຍທຶນທຳການຕົດຂູດຣິດກຳ ມະກອນໃນຈຳນວນຫນອຍ. ສະພາບການໄດ້ປ່ຽນແປງ ໃນເມື່ອໂຮງຈັກໂຮງ ງານທຶນນິຍົມໄດ້ຂະຫຍາຍຕົວກ້ວາງຂວາງອອກ ບົນພື້ນຖານອຸດສາຫະກຳ ກົນ ຈັກຂະໜາດໃຫຍ່. ນາຍທຶນກໍເລີ່ມທຳການຂູດຣິດຍັນດາກຳມະກອນນັບ ເປັນ ພັນເປັນໝື່ນແລ້ວ. ຕົວຢ່າງນາຍທຶນຜູ້ໜຶ່ງໄດ້ຈ້າງກຳມະກອນ ๑.๐๐๐ ຄົນ ແລະ ໃນທຸກໆປີ ມັນຈະຕ້ອງໄດ້ຈ່າຍຄ່າແຮງງານ ๘ ລ້ານໂດລາ. ກຳມະ ກອນໄດ້ ສ້າງລຸນຄ່າສ່ວນເກີນເຕັມອັດຕາສ່ວນ (ມາດຕະຖານລຸນຄ່າສ່ວນ ເກີນ ๑๐๐%) ๘ ລ້ານໂດລາໃຫ້ແກ່ນາຍທຶນຕໍ່ປີ. ນາຍທຶນຈະບໍ່ໃຊ້ຈ່າຍລຸນ ຄ່າສ່ວນເກີນທັງໝົດ ເພື່ອການຊຶ່ມໃຊ້ສ່ວນຕົວ ແຕ່ມັນຈະໃຊ້ຈ່າຍ ພຽງແຕ ພາກສ່ວນໜຶ່ງເທົ່ານັ້ນ. ອີກສ່ວນໜຶ່ງຈະຖືກນຳໄປໃຊ້ເພື່ອຂະຫຍາຍການຜະ

ລິດ, ຊື້ອຸປະກອນເຄື່ອງຈັກອັນໃຫມ່, ວັດຖຸດິບ ແລະ ຈ້າງກຳມະກອນ ເພີ່ມ ເຕີມອີກ. ໃນທີ່ນີ້ແມ່ນໄດ້ມີ<u>ການຜະລິດສຳເປີດກວ້າງ</u>ແລ້ວ ຫລືວ່າແມ່ນ <u>ການ ສະສົມທຶນ</u> ກໍເພາະວ່າພາກສ່ວນຫນຶ່ງຂອງຄຸນຄ່າສ່ວນເກີນ ໄດ້ກາຍມາ ເປັນ ທຶນເສຍແລ້ວ.

ພວກເຮົາມາສຶກສາເບິ່ງຕົວຢ່າງຂ້າງລຸ່ມນີ້ກ່ຽວກັບ ຂະບວນການຫັນປ່ຽນ ເປັນທຶນຂອງຄຸນຄ່າສ່ວນເກີນ. ສົມມຸດວ່າ ນາຍທຶນມີຕົ້ນທຶນ ๑๐ລ້ານໂດລາ. ຈາກຈຳນວນລວມນີ້ ມັນເອົາຕົ້ນທຶນເປັນທຶນຄົງທີ່ ๗ ລ້ານແລະ ທຶນປ່ຽນ ๘ ລ້ານໂດລາ. ມາດຕະຖານຄຸນຄ່າສ່ວນເກີນເຕັມອັດຕາສ່ວນ ๑๐๐ %. ໃນ ໄລຍະການຜະລິດນັ້ນທຶນຄົງທີ່ທັງຫມົດຈະເຂົ້າປະກອບຢູ່ໃນຄຸນຄ່າຜະລິດຕະພັນ ແລະຈະມີການຜະລິດສິນຄ້າດ້ວຍມູນຄ່າ ๑๘ ລ້ານໂດລາ.(๗ລ້ານ c + ๘ ລ້ານ v + ๘ ລ້ານ = m).

ສົມມຸດວ່າ ຄຸນຄ່າສ່ວນເກີນທີ່ເທົ່າກັບ ๘ ລ້ານໂດລາ, ນາຍທຶນຈະແບ່ງ ປັນມັນດັ່ງນີ້: ເພື່ອທຳການຂະຫຍາຍການຜະລິດ ๑ ລ້ານແລະເພື່ອ ການຊົມ ໃຊ້ສ່ວນຕົວ ๑ ລ້ານໂດລາ.ໃນທີ່ນີ້ພາກສ່ວນຄຸນຄ່າສ່ວນເກີນທີ່ໃຊ້ເຂົ້າ ໃນ ການຂະຫຍາຍການຜະລິດນັ້ນຈະຖືກຫັກໄປໃສ່ທຶນຄົງທີ່ແລະທຶນປ່ຽນໃນ ອັດຕາ ຊຶ່ງເທົ່າກັບອັດຕາແບ່ງປັນ. ຕົ້ນທຶນໃນເບື້ອງຕົ້ນຄື ๔:๑(๗๐๐ພັນ c +๘๘๐๐ ພັນ v).

ດັ່ງນັ້ນໃນຕະຫລອດປີທີສອງຢູ່ພາຍໃນໂຮງງານຈະມີທຶນເຄື່ອນໄຫວ ເປັນ ຈຳນວນ ๑๑ລ້ານໂດລາ (๗.๗๐๐ພັນc +๘.๘๐๐ພັນ v).ຖ້າວ່າ ມາຕະ ຖານຄຸນຄ່າສ່ວນເກີນຫາກເທົ່າກັບ๑๐๐%ແລ້ວເມື່ອນັ້ນໃນປີທີສອງການ ຜະລິດ ສິນຄ້າຈະຕົກເປັນເງິນ๑ຂ,๘ລ້ານໂດລາ.(๗.๗๐๐ພັນ c +๘.๘๐๐ ພັນ v + ๘.๘๐๐ ພັນ m).

ຢູ່ໃນປີທີສອງນີ້ໄດ້ເກີດມີການເພີ່ມບໍລິມາດການຜະລິດແລະເພີ່ມບໍລິ ມາດ ຄຸນຄ່າສ່ວນເກີນຂຶ້ນຍ້ອນວ່າພາກສ່ວນຫນຶ່ງຂອງຄຸນຄ່າສ່ວນເກີນທີ່ໄດ້ຮັບໃນປີທີ ຫນຶ່ງນັ້ນໄດ້ຫັນປ່ຽນເປັນທຶນແລ້ວ. ດ້ວຍເຫດນີ້ຄຸນຄ່າສ່ວນເກີນຈຶ່ງເປັນບໍ່ເກີດ ແຫ່ງການສະສົມທຶນ. ຈາກການເຕົ້າໂຮມທຶນນີ້ ພວກນາຍທຶນຍິ່ງເພີ່ມທະ ວີ ກ້ອນທຶນຂອງຕົນອອກ.

ດ້ວຍຄວາມຢາກໄດ້ຄຸນຄ່າສ່ວນເກີນເພື່ອສ້າງຮັ່ງຄູນມີໃຫ້ແກ່ຕົນນັ້ນ ນາຍ

ທຶນກໍເສີມຂະຫຍາຍການຜະລິດຂອງຕົນອອກຢ່າງລຽນຕິດ. ນອກຈາກນີ້ ການຊ່ວງເສັງກັນກໍໄດ້ບັງຄັບໃຫ້ພວກນາຍທຶນແຕ່ລະຄົນ ຕ້ອງໄດ້ປັບປຸງ ເຕັກນິກ, ເສີມຂະຫຍາຍການຜະລິດອອກເພື່ອຫລີກເວັ້ນຄວາມຫລົ້ມຈົມນັ້ນເອງ. ຖ້າຫາກຢຸດຕິການເສີມຂະຫຍາຍປັບປຸງທາງດ້ານເຕັກນິກ ແລະ ການຜະລິດແລ້ວ ກໍ່ຫມາຍຄວາມວ່າຖືກປະລາໄຊ, ຄູ່ແຂ່ງກໍ່ຈະໄດ້ຮັບໄຊຊະນະ.

ແຕ່ຖ້າວ່າໃນເມື່ອພວກນາຍທຶນຫາກເສີມຂະຫຍາຍການຜະລິດຢ່າງ ລຽນຕິດເຊັ່ນນີ້ ພາກສ່ວນຄຸນຄ່າສ່ວນເກີນທີ່ນຳໄປຊົມໃຊ້ສ່ວນຕົວຂອງພວກ ເຂົາເຈົ້ານັ້ນ ຈະຫລຸດຫນ້ອຍຖອຍລົງບໍ ? ບໍ່. ຈາກການເພີ່ມທະວີຄວາມຮັ່ງມີ - ຂອງຊົນຊັ້ນນາຍທຶນນັ້ນ ພາກສ່ວນຄຸນຄ່າສ່ວນເກີນທີ່ຖືກນຳໄປຊົມໃຊ້ ສ່ວນຕົວຂອງນາຍທຶນ ກໍ່ຈະເພີ່ມທະວີຂຶ້ນເຊັ່ນດຽວກັນ. ຕົວຢ່າງ ເສດຖີເງິນລ້ານອາເມລິກາສະໄຫມປະຈຸບັນ ມີເຮືອນພັກພິເສດຫລາຍຫລັງ, ເຮືອທ່ອງທ່ຽວ ລາຄາແພງ, ລົດເກັງຊັ້ນດີນັບເປັນສິບເປັນຮ້ອຍຄັນ, ເຮືອບິນຫລາຍລຳ. ຢູ່ໃນສະຫະລັດອາເມລິກາ ໃນແຕ່ລະ ລະດູການ ງານລ້ຽງຕ້ອນຮັບເປັນກຽດ ທີ່ຈັດຂຶ້ນໂດຍຫນຶ່ງໃນຊຸມ ຜ້ວ ຄອບຄົວມະຫາເສດຖີໄດ້ທຸ່ມເທໃສ່ການ ໃຊ້ຈ່າຍຢ່າງມະຫາສານຊຶ່ງຄອບຄົວທຳມະດາສາມັນທີ່ມີສະມາຊິກ ๕ ຄົນຈະສາມາດ-ລ້ຽງຊີບຕົນໄດ້ຕະຫລອດຊີ່ວຊີວິດໂດຍບໍ່ຕ້ອງອອກແຮງງານຫຍັງເລີຍ. ອັນນີ້ໄດ້ຊີ້ໃຫ້ເຫັນວ່າ ດ້ວຍມີການສະສົມທຶນນັ້ນເອງຈຶ່ງເຮັດໃຫ້ການຫລົ້ນກົນ ຟູມເຟືອຍຂອງຊົນຊັ້ນນາຍທຶນສູງຂຶ້ນ.

ບັນດານັກວິທະຍາສາດນາຍທຶນ ຕ່າງກໍ່ພາກັນອະທິບາຍວ່າ ການສະສົມ-ທຶນແມ່ນການປະຢັດຊັດທ່ຽງຂອງພວກນາຍທຶນ ຊຶ່ງມັນຄ້າຍກັບວ່າພວກຕົນ ມີຄວາມຫ່ວງໃຍເຖິງສິດຜົນປະໂຫຍດຂອງສັງຄົມມະນຸດ ດ້ວຍເຫດນັ້ນຈຶ່ງ ຈຳຕ້ອງຈຳກັດຄວາມຕ້ອງການຂອງຕົນລົງ. ຕົວແທນທີ່ດັ່ນທີ່ສຸດຕໍ່ທັດສະນະ ດັ່ງກ່າວນີ້ ແມ່ນໄດ້ແກ່ ນັກເສດຖະສາດຊາວອັງກິດ ສະຕະວັດທີ ๑๗ ຊື່ວ່າ ເສນິໂອ. ເຂົາປະກາດວ່າ "ຂ້າພະເຈົ້າຂໍປ່ຽນແທນຄຳສັບທຶນທີ່ຖືເປັນ ເຄື່ອງມືການຜະລິດນັ້ນດ້ວຍຄຳສັບອົດກັ້ນ "๑).

ກ່ຽວກັບຄຳວ່າ "ອົດກັ້ນ" ດັ່ງກ່າວນີ້ ທ່ານມາກ ໄດ້ເນັ້ນວ່າ ນາຍທຶນໄດ້ຈຳກັດການຊົມໃຊ້ຂອງຕົນ, ໂດຍເອົາເຄື່ອງມືແຮງງານໃຫ້ກຳມະກອນ - "ເຊົ່າ" ເພື່ອຕົນຈະໄດ້ມີລົດໄຟ, ລາງລົດໄຟ ແລະ ອື່ນໆ. ຕໍ່ທິດສະດີ ແກ້

๑) ກ.ມາກ ແລະ ຟ.ອັງແກນ. ບົດນິພົນ, ເຫລັ້ມ ๘ມ, ຫນ້າ ຜ້๑๐.

ຕົວນີ້ ທ່ານ ມາກ ໄດ້ເວົ້າຢ່າງເຢາະເຢີ້ຍວ່າ ມະນຸດສະທຳຢ່າງທຳມະດາ-ແນ່ນອນຈະຕ້ອງຊ່ວຍພວກທ່ານນາຍທຶນໃຫ້ໄດ້ຮັບການປົດປ່ອຍອອກຈາກ"ຄວາມທຸກທໍລະມານ " ເຫລົ່ານັ້ນແຕ່ຫາກດ້ວຍວິທີການປົດສິດຂອງພວກເຂົາເຈົ້າໃນການເປັນເຈົ້າຂອງພາຫະນະການຜະລິດ.

ຢູ່ໃນທ້າຍສະຕະວັດທີ ๑ຈ "ທິດສະດີ" ເສນີໂອ ໄດ້ຖືກປ່ຽນໂສມຫນ້າ-ໃຫມ່ ດ້ວຍນັກເສດຖະສາດຊາວອັງກິດຊື່ ມາກຊານ ແລະ ນັກເສດຖະສາດຊາວອາເມລິກາ ຊື່ ກາກແວ ຊຶ່ງທັງສອງໄດ້ພາກັນປ່ຽນຄຳສັບ "ອິດກັ້ນ " ດ້ວຍຄຳສັບ " ລໍຄອຍ".

ທິດສະດີທັງຫມົດນີ້ ແນໃສ່ຢາກແກ້ຕົວໃຫ້ລະບອບທຶນນິຍົມ ແລະການກົດຂີ່ຂູດຮີດແບບທຶນນິຍົມ. ໃນຕົວຈິງແລ້ວ ການສະສົມທຶນ ແລະບໍລິມາດການ ສະສົມທຶນບໍ່ໄດ້ຂຶ້ນກັບການ "ອິດກັ້ນ" ຂອງນາຍທຶນເຫມືອນດັ່ງບັນດານັກທິດສະດີທີ່ພະຍາຍາມຢັ້ງຢືນນັ້ນເລີຍ ແຕ່ຫາກຂຶ້ນກັບການກົດຂີ່ຂູດຮີດຊົນຊັ້ນກຳມະກອນຕ່າງຫາກ. ຄືຕົວຢ່າງທຶນ ๗๐๐๐ c + ๘๐๐๐ v ນັ້ນເອງ. ຖ້າວ່າມາດຕະຖານຄຸນຄ່າສ່ວນເກີນເທົ່າກັບ ๑๐๐ % ແລ້ວເມື່ອນັ້ນ ຜົນກຳໄລກໍຈະເປັນ ๘๐๐๐ m . ແຕ່ ຫາກມາດຕະຖານຄຸນຄ່າສ່ວນເກີນເທົ່າກັບ ๘๐๐% ກໍຈະໄດ້ຜົນກຳໄລເຖິງ ๔.๐๐๐ m . ສະຫລຸບໄດ້ວ່າລະດັບການກົດຂີ່ຂູດຮີດຍິ່ງສູງຂຶ້ນເທົ່າໃດ ຄຸນຄ່າສ່ວນເກີນແລະທຶນສະສົມຍິ່ງຈະສູງຂຶ້ນເທົ່ານັ້ນ. ການເພີ່ມທະວີລະດັບການກົດຂີ່ຂູດຮີດແຮງງານກຳມະກອນໄດ້ປະຕິບັດໂດຍແກ່ຍາວວັນທຳງານກຳມະກອນອອກຕື່ມ, ໂດຍເພີ່ມແຮງງານສຸມ ຫລຸດຜ່ອນ ຄ່າແຮງງານລົງຕຳ່ກວ່າຄຸນຄ່າແຮງງານຄົນແລະອື່ນໆ.

ປັດໄຈອັນສຳຄັນໃນການຊຸກຍູ້ການສະສົມທຶນໃຫ້ສູງຂຶ້ນນັ້ນ ແມ່ນການເພີ່ມທະວີສະມັດຖະພາບແຮງງານ. ການເພີ່ມທະວີສະມັດຖະພາບແຮງງານ ໄດ້ເຮັດໃຫ້ຕົ້ນທຶນສິນຄ້າຫລຸດຕຳ່ລົງຊຶ່ງສ້າງເງື່ອນໄຂໃຫ້ນາຍທຶນໄດ້: ກ) ຫລຸດຜ່ອນຄຸນຄ່າແຮງຄົນລົງ ຊຶ່ງຊ່ວຍໃຫ້ສາມາດນຳໃຊ້ບໍລິມາດແຮງງານກຳມະ - ກອນເຂົ້າສູ່ການຜະລິດດ້ວຍທຶນປ່ຽນຈຳນວນເດີມຫລາຍຂຶ້ນຕື່ມ ແລະ ມີຄວາມສາມາດທຳການຜະລິດສິນຄ້າກໍຄືຄຸນຄ່າສ່ວນເກີນນັ້ນເອງໄດ້ຫລາຍຂຶ້ນ; ຂ) ເພີ່ມທະວີການຊົມໃຊ້ສ່ວນຕົວຂອງນາຍທຶນຂຶ້ນຕື່ມ ໂດຍບໍ່ໄດ້ຫລຸດສ່ວນ ຫນຶ່ງຂອງຄຸນຄ່າສ່ວນເກີນທີ່ໃຊ້ເຂົ້າໃນການຂະຫຍາຍການຜະລິດນັ້ນລົງ; ຄ) ຂະ

ຫຍາຍກ້ວ້າງການຜະລິດໄດ້ໄວຍິ່ງຂຶ້ນດ້ວຍວິທີການນຳໃຊ້ເຄື່ອງກົນຈັກ ທີ່ມີລາ
ຄາຕ່ຳສຸດ ໂດຍບໍ່ໄດ້ເພີ່ມທະວີຄຸນຄ່າສ່ວນເກີນທີ່ພົ້ນປ່ຽນເປັນທຶນ.

ວົງກ້ວ້າງຂອງຕົ້ນທຶນກໍ່ສົ່ງຜົນສະທ້ອນຕໍ່ບໍລິມາດການສະສົມທຶນເຊັ່ນດຽວ-
ກັນ. ບໍລິມາດທຶນທີ່ຫັກອອກເປັນ c ແລະ v ດ້ວຍຄຸນຄ່າກ່ຳກ້ວງກັນນັ້ນ ຍິ່ງ
ສູງຂຶ້ນເທົ່າໃດ ບໍລິມາດຂອງທຶນປ່ຽນ ກໍ່ຍິ່ງສູງຂຶ້ນເທົ່ານັ້ນ. ດ້ວຍເຫດນີ້ບໍ
ລິມາດການສະສົມທຶນຈຶ່ງຂຶ້ນໂດຍກົງກັບວົງກ້ວ້າງຂອງຕົ້ນທຶນ. ນີ້ຄືປັດໄຈຕົ້ນຕໍ
ຂອງບໍລິມາດການສະສົມທຶນ.

ການສະສົມທຶນໄດ້ສົ່ງຜົນສະທ້ອນຕໍ່ລະພາບການເປັນຢູ່ຂອງຊຶ້ນຊັ້ນ ກຳມະ
ກອນຄືແນວໃດ ? ເພື່ອຈະໃຫ້ຄຳຕອບຕໍ່ບັນຫານີ້ ໃນເບື້ອງຕົ້ນຕ້ອງຮູ້ຈັກກັບ-
ທຶດສະດີຂອງທ່ານ ມາກ ວ່າດ້ວຍໂຄງປະກອບຂອງທຶນເສຍກ່ອນ.

ໂຄງປະກອບຂອງທຶນ ຢູ່ໃນທຶດສະດີຂອງ ມາກ ວ່າດ້ວຍຄຸນຄ່າ ສ່ວນ
ເກີນນັ້ນ ທ່ານ ມາກ ໄດ້ຄົ້ນພົບການແບ່ງແຍກ
ທຶນອອກເປັນທຶນຄົງທີ່ ແລະ ທຶນປ່ຽນ. ເພາະສະນັ້ນທ່ານຈຶ່ງໄດ້ເປີດເຜີຍໃຫ
ເຫັນເຖິງບໍ່ເກີດຕົ້ນຕໍຂອງຄຸນຄ່າສ່ວນເກີນ. ທ່ານ ກ.ມາກ ໄດ້ນຳເອົາ ທຶດ
ສະດີວ່າດ້ວຍໂຄງປະກອບຂອງທຶນເພີ່ມຕື່ມເຂົ້າໃນທຶດສະດີວ່າດ້ວຍການສະສົມ
ທຶນ.

ໂຄງປະກອບຂອງທຶນສາມາດເບິ່ງໄດ້ໃນສອງແງ່ຄື: ທາງດ້ານວັດຖຸ ທຳ
ມະຊາດ ແລະ ທາງດ້ານຄຸນຄ່າ. ໂຄງປະກອບຂອງທຶນຕາມຄຸນຄ່າທີ່ ກຳນົດ
ໂດຍອັດຕາແບ່ງແຍກ ເງິນທຶນອອກເປັນພາກສ່ວນຄົງທີ່ແລະພາກສ່ວນປ່ຽນ .
ໂຄງປະກອບຂອງທຶນຕາມຄຸນຄ່າເອີ້ນວ່າ<u>ໂຄງປະກອບຄຸນຄ່າຂອງທຶນ.</u>

ສ່ວນທາງດ້ານຮູບການວັດຖຸທຳມະຊາດນັ້ນ ທຶນທີ່ທຳໜ້າທີ່ຢູ່ໃນໄລຍະຂະ
ບວນການຜະລິດໄດ້ແຍກອອກເປັນພາຫະນະການຜະລິດ ແລະ ແຮງງານ ຄືນ
ໂດຍປະກອບຂອງທຶນທີ່ກຳນົດໂດຍການຫານລະຫວ່າງຈຳນວນພາຫະນະ ການ
ຜະລິດ<u>ທີ່ຖືກ</u>ນຳໃຊ້ ແລະ ປະລິມານແຮງງານ ທີ່ຈຳເປັນໃຫ້ແກ່ການນຳໃຊ້ພາ
ຫະນະການຜະລິດ ຊຶ່ງເອີ້ນວ່າ <u>ໂຄງປະກອບເຕັກນິກຂອງທຶນ.</u> ການປະສານ
ກັນຢ່າງກົມກຽວດ້ວຍກາວນີ້ແມ່ນຂຶ້ນກັບລະດັບການປະກອບເຕັກນິກເຂົ້າໃນໂຮງ
ຈັກໂຮງງານ.

ນອກນີ້ຍັງມີການປະສານສົມທົບກັນຢ່າງແຫນ້ນຫນາລະຫວ່າງໂຄງປະກອບຄຸນຄ່າແລະ ໂຄງປະກອບເຕັກນິກຂອງທຶນ. ການປ່ຽນແປງຢູ່ໃນໂຄງປະກອບເຕັກນິກຂອງທຶນສົ່ງຜົນກະທົບເຖິງຄຸນຄ່າ. ເພາະສະນັ້ນການກ່ຽວພັນລະຫວ່າງທຶນຄົງທີ່ ແລະ ທຶນປ່ຽນກໍຄືໂຄງປະກອບຄຸນຄ່າຂອງທຶນ ຊຶ່ງໄດ້ການົດຂຶ້ນດ້ວຍໂຄງປະກອບເຕັກນິກຂອງທຶນ ແລະ ສ່ອງແສງເຖິງການປ່ຽນແປງຂອງ ໂຄງປະກອບເຕັກນິກຂອງທຶນດັ່ງກ່າວນັ້ນ ທ່ານມາກ ເອີ້ນວ່າ <u>ໂຄງປະກອບ ຂອງທຶນ.</u>

ສະຫລຸບໄດ້ວ່າ ໂຄງປະກອບຂອງທຶນແມ່ນການຫານ c : v (c ປັນໃຫ້ v). ຕົວຢ່າງ, ຖ້າວ່າທຶນປະກອບມີ ຊ00 c + ຄ00 v ເມື່ອນັ້ນ ໂຄງປະກອບຂອງທຶນຈະເທົ່າກັບ ๔:๑. ໂປດລະວັງຢ່າຫລົງປົນເປກັນລະຫວ່າງໂຄງປະກອບຄຸນຄ່າຂອງທຶນ ກັບໂຄງປະກອບຂອງທຶນ. ໂຄງ ປະກອບຄຸນຄ່າຂອງທຶນ ສາມາດຂຶ້ນໆລົງໆຕາມລາຄາຊື້ຂາຍພາຫະນະການຜະລິດແລະແຮງງານຄົນ. ໂຄງປະກອບຂອງທຶນຈະມີການປ່ຽນແປງໄດ້ກໍເນື່ອງມາ ຈາກຜົນສະທ້ອນຂອງການປ່ຽນແປງທາງດ້ານໂຄງປະກອບເຕັກນິກເທົ່ານັ້ນ. ໃນຂະນະທີ່ລະບອບທຶນນິຍົມຂະຫຍາຍຕົວ ແລະ ການສະສົມທຶນເພີ່ມທະວີຂຶ້ນນັ້ນໂຄງປະກອບຂອງທຶນຈະຖີບຕົວສູງຂຶ້ນສະເຫມີ. ເຊັ່ນ, ຢູ່ໃນອຸດສາຫະກຳປຸງແຕ່ງຂອງສະຫະລັດອາເມລິກາໃນປີ ๑ຊຊຈ ໂຄງປະກອບຂອງທຶນມີແຕ່ ๔,๕ :๑ ຕົກມາໃນປີ ๑ຈນນ- ຜ:๑, ๑ຈຜ້ຜ- ຊ:๑.

ການເຕີບໃຫຍ່ຂະຫຍາຍຕົວຂອງໂຄງປະກອບຂອງທຶນ ສະແດງໃຫ້ ເຫັນວ່າ ຈາກການຂະຫຍາຍຕົວທາງດ້ານການຜະລິດ ບໍລິມາດວັດຖຸດິບ, ເຄື່ອງກົນຈັກຕ່າງໆ, ອຸປະກອນເຄື່ອງມື ໄດ້ເພີ່ມທະວີສູງຂຶ້ນ ໂດຍສົມທຽບກັບການນຳໃຊ້ແຮງງານກຳມະກອນຢູ່ໃນການຜະລິດ. ເຊັ່ນຕົວຢ່າງໂຄງປະກອບຂອງທຶນເບື້ອງຕົ້ນມີແຕ່ ๑:๑ ແລະໃນເວລາຕໍ່ມາກໍກາຍເປັນ ๘:๑, ນ:๑, ๔:๑, ๕:๑ ແລະ ຕໍ່ໆໄປ. ຫມາຍຄວາມວ່າອັດຕາສ່ວນທຶນປ່ຽນຢູ່ໃນຕົ້ນທຶນທັງຫມົດນັ້ນຕົກຈາກ ๑/๘ ເຖິງ ๑/ນ, ๑/๔, ๑/๕, ๑/ຜ ແລະ ຕໍ່ໆໄປ. ແຕ່ວ່າເພີ່ນບໍ່ຮ່ອນໃຊ້ທຶນທັງຫມົດເຂົ້າໃນທຸລະກິດແຕ່ໃຊ້ພຽງພາກສ່ວນຫນຶ່ງທີ່ປ່ຽນຂອງທຶນເທົ່ານັ້ນ. ດ້ວຍເຫດນີ້ການຫລຸດທຶນປ່ຽນລົງ ໄດ້ເຮັດໃຫ້ການ ດູດດຶງເອົາກຳມະກອນເຂົ້າສູ່ການຜະລິດຫລຸດຫນ້ອຍຖອຍລົງ.

ຈາກສາຍເຫດດັ່ງກ່າວນີ້ ກຳມະກອນຈຳນວນຫລວງຫລາຍຈຶ່ງບໍ່ ສາມາດ ນຳໃຊ້ແຮງງານຂອງຕົນໄດ້. ພາກສ່ວນໜຶ່ງ ຂອງຊົນຊັ້ນກຳມະກອນ ກໍກາຍ ເປັນພາກສ່ວນ "ເສດເຫລືອ" ຖ້າທຽບໃສ່ຄວາມຕ້ອງການຂອງການສະສົມ ທຶນ. ອັນທີ່ຮັ້ນກັນວ່າ "ເສດປະຊາຊົນ"ປະກົດຕົວຂຶ້ນ ຫລື ປະຊາກອນສ່ວນ ເກີນ ທຽບຖານກໍຄື ໄພທ່ວງງານນັ້ນເອງ.

ຈາກການທີ່ມີປະຊາກອນສ່ວນເກີນທຽບຖານນີ້ ຈຶ່ງໄດ້ເກີດມີກົດເກນທຶນນິ ຍົມ ວ່າດ້ວຍປະຊາກອນຂຶ້ນ. ທ່ານມາກ ໄດ້ຄົ້ນຄິດວິໄຈຢ່າງລັກແນ່ເຖິງເນື້ອ ໃນກົດເກນທຶນນິຍົມ ວ່າດ້ວຍປະຊາກອນນີ້ ແລະເຫັນວ່າ ຄຸນຄ່າສ່ວນເກີນປະ ກອບສ້າງຂຶ້ນຍິ່ງຫລາຍເທົ່າໃດ ການສະສົມທຶນ ແລະ ໂຄງປະກອບຂອງມັນກໍ ຍິ່ງຈະຫລາຍ ແລະ ສູງຂຶ້ນເທົ່ານັ້ນ. ແຕ່ວ່າການສະສົມທຶນ ແລະ ໂຄງປະ-ກອບຂອງມັນຫາກຫລາຍ ແລະ ສູງຂຶ້ນເທົ່າໃດ ແຮງງານຄົນທີ່ດ້ວງດູດ ເຂົ້າຢູ່ ໃນຂະບວນການຜະລິດກໍ່ຍິ່ງຈະໜອຍລົງເທົ່ານັ້ນ.

ຂະບວນແຮງງານສຳຮອງຂອງຊຸດ ສາທະກຳ ແລະ ຮູບການຂອງມັນ

ການແກ້ດ້ວງກຳມະກອນອອກຈາກ ການຜະລິດໄດ້ເຮັດໃຫ້ເກີດມີຂະ ບວນຄົນຫວ່າງງານຂຶ້ນຢູ່ຕາມບັນ ດາປະເທດທຶນນິຍົມ.

ສາຍເຫດຕົ້ນຕໍໃນການເກີດມີຂະບວນແຮງງານສຳຮອງຂອງຊຸດສາທະກຳ ຢູ່ໃນລະບອບທຶນນິຍົມນີ້ ແມ່ນມາຈາກການເຕີບໃຫຍ່ຂະຫຍາຍຕົວຂອງໂຄງປະ ກອບຕັກນິກຂອງທຶນ ກໍຄືການເຕີບໃຫຍ່ຂະຫຍາຍຕົວຢ່າງວ່ອງໄວກວ່າ ຂອງ ທຶນຄົງທີ່ ໂດຍທຽບໃສ່ກັບທຶນປ່ຽນ. ຄຽງຄູ່ກັບສາຍເຫດດັ່ງກ່າວນີ້ກໍຍັງມີສາຍ ເຫດອື່ນໆອີກທີ່ເຮັດໃຫ້ມີການເພີ່ມທະວີໄພທ່ວງງານຂຶ້ນເຊັ່ນ: ກ) ການແກ-ຍາວວັນທຳງານ ແລະ ການເພີ່ມທະວີແຮງງານສຸມ. ໂດຍສວຍໃຊ້ ຂະບວນ ຄົນຫວ່າງງານພວກນາຍທຶນສາມາດບັງຄັບໃຫ້ກຳມະກອນຜູ້ໜຶ່ງທີ່ມີອຽກ ເຮັດ ງານທຳຢູ່ນັ້ນ ຕ້ອງອອກແຮງງານໄດ້ເທົ່າກັບ ๔, ๕ ແລະຫລາຍໆຄົນ ແລະ-ສ່ວນດ້ວງກ່າວໄດ້ເຮັດໃຫ້ຂະບວນແຮງງານສຳຮອງຂອງຊຸດສາທະກຳເພີ່ມທະ ວີ ຂຶ້ນ; ຂ) ການເພີ່ມທະວີແຮງງານແມ່ຍິງ ແລະເດັກນອຍ. ການນຳໃຊ້ເຕັກ ນິກ ແລະການມີອຽກງ່ານງ່າຍໆໃຫ້ເຮັດ ໄດ້ດຶງດູດເອົາແມ່ຍິງແລະເດັກນ້ອຍ

ເຂົ້າສູ່ການຜະລິດ. ພວກເຂົາເຈົ້າໄດ້ຮັບຄ່າແຮງງານດ້ວຍລາຄາຖືກ ແລະ ສິ່ງດັ່ງກ່າວ ໄດ້ເຮັດໃຫ້ກຳມະກອນຜູ້ໃຫຍ່ຈຳຕ້ອງຖືກປົດປ່ອຍອອກຈາກງານ; ຄ) ການລົ້ມລະລາຍຂອງຊາວຜູ້ຜະລິດນ້ອຍ ໃນຂະນະທີ່ມີການສະສົມທຶນຢ່າງຫລວງຫລາຍນັ້ນ ໄດ້ເຮັດໃຫ້ເກີດມີຂະບວນລົ້ມລະລາຍຂອງຊາວຜູ້ຜະລິດນ້ອຍ ຄືຊາວໄຮ່ນາແລະນາຍຊ່າງຫັດຖະກຳຊຶ່ງທັງຫມົດກໍໄດ້ກາຍເປັນຄົນ ຫວ່າງງານ ເຊັ່ນດຽວກັນ.

ຂະບວນແຮງງານສຳຮອງຂອງອຸດສາຫະກຳ ເປັນສິ່ງທີ່ຕ້ອງການ ສຳລັບ ນາຍທຶນ ເພື່ອບີບຮັດຢ່າງເປັນລະບົບ ຕໍ່ບັນດາກຳມະກອນ ເພາະມັນຊ່ວຍໃຫ້ ນາຍທຶນ ມີຄວາມສາມາດຫລຸດອັດຕາຄ່າແຮງງານຂອງບັນດາກຳມະກອນ ທີ່ມີ ວຽກເຮັດງານທຳນັ້ນລົງ, ແລ້ວເພີ່ມທະວີແຮງງານສຸມກໍຄືການກົດຂີ່ຂູດຮີດຊົນ ຊັ້ນກຳມະກອນນັ້ນເອງ. ດ້ວຍເຫດນີ້ ພວກນາຍທຶນຈຶ່ງມີຄວາມສົນໃຈຢາກຮັກ ສາໄພຫວ່າງງານນີ້ໄວ້ສ່ວນໃດສ່ວນຫນຶ່ງ.

ຢູ່ໃນປະເທດທຶນນິຍົມຕ່າງໆ ປະຊາກອນສ່ວນເກີນທຽບຖານຫລືໄພຫວ່າງ ງານມີຫລາຍຮູບແບບທີ່ແຕກຕ່າງກັນ ແຕ່ຕົ້ນຕໍມີສາມຮູບການຄື: <u>ບໍ່ຄົງຕົວ, ປົກ ປົດ</u> ແລະ<u>ຊຳ້ເຮື້ອ.</u> ພວກເຮົາມາໄຈ້ແຍກເບິ່ງແຕ່ລະຮູບການ.

<u>ຮູບການຫວ່າງງານບໍ່ຄົງຕົວຂອງປະຊາກອນ</u>ແມ່ນຂະບວນກຳມະກອນທີ່ໄດ້ ເຂົ້າທຳການຜະລິດ ແລະ ຖືກໄລ່ອອກຈາກການຜະລິດໃນບາງຄັ້ງຄາວ. ສະ ນັ້ນເວົ້າລວມແລ້ວຍັງມີຄົນຫວ່າງງານຢູ່ຕະຫລອດນັ້ນເອງ. ສາຍເຫດທີ່ພາໃຫ້ ກຳມະກອນ ໄດ້ເຂົ້າສູ່ການຜະລິດນັ້ນ ແມ່ນຍ້ອນມີການເສີມຂະຫຍາຍການຜະ ລິດ, ເປີດໂຮງຈັກໂຮງງານໃຫມ່, ສ່ວນສາຍເຫດທີ່ກຳມະກອນຖືກຂັບໄລ່ - ອອກຈາກງານນັ້ນ ແມ່ນຍ້ອນມີການຫລຸດຜ່ອນການຜະລິດ, ການນຳໃຊ້ເຄື່ອງ ກົນຈັກໃຫມ່, ອັດໂຮງຈັກໂຮງງານ ແລະ ອື່ນໆ.ຮູບການການຫວ່າງງານດັ່ງ ກ່າວນີ້ ໄດ້ແຜ່ລາມອອກຢ່າງກວ້າງຂວາງຢູ່ຕາມຕົວເມືອງ ແລະ ສູນກາງອຸດ ສາຫະກຳຕ່າງໆ.

<u>ຮູບການຫວ່າງງານປົກປົດ</u>ຂອງປະຊາກອນສ່ວນເກີນ ຫລື <u>ປະຊາກອນ - ສ່ວນເກີນໃນດ້ານກະສິກຳ</u> ແມ່ນຢູ່ບ່ອນວ່າມີກຳມະກອນຫລືອງານຢູ່ໃນ ກະສິ ກຳເລື້ອຍໆ. ກຳມະກອນຫລືອງານ ເກີດຂຶ້ນຍ້ອນວ່າ ຊາວກະສິກອນ ທີ່ມີທີ່ ດິນປູກຝັງບໍ່ອຸດົມສົມບູນດີ, ມີຊີວິດຢູ່ຢ່າງອຶດຫິວ ແລະ ຖ້າມີໃຜຕ້ອງການ ຊື້

ແຮງງານຂອງເຂົາເຈົ້າ ເຂົາກໍຕຽມພ້ອມທີ່ຈະຂາຍແຮງງານຂອງຕົນ ໃນທັນທີ.

ນອກຈາກນີ້ ກໍຍັງມີຄວາມແຕກຕ່າງກັນພາຍໃນຊາວໄຮ່ນາ ມີການ ແບ່ງແຍກຜູ້ທຸກຜູ້ຮັ່ງຂຶ້ນ. ຊາວໄຮ່ນາທີ່ເຮັດວຽກຮັບຈ້າງເຈົ້າທີ່ດິນ ແລະ ນາຍທຶນຊົນນະບົດກໍເກີດເປັນຂະບວນຊາວກຳມາຊີບກະສິກຳຂຶ້ນ. ເມື່ອຮົບໂຮມ ເອົາດິນດອນຕອນຫຍ້າມາເປັນຂອງຕົນທັງຫມົດແລ້ວ ພວກເຈົ້າທີ່ດິນກະສິກຳ ທຶນນິຍົມ ກໍໄດ້ນຳໃຊ້ເຄື່ອງກົນຈັກນັບມື້ນັບຫລາຍຂຶ້ນ ແລະ ເມື່ອນັ້ນຄວາມ ຕ້ອງການຕໍ່ແຮງງານກຳມະກອນຢູ່ໃນກະສິກຳກໍຖືກຫລຸດຫນ້ອຍຖອຍລົງຢ່າງສົ້ນເຊີງ. ເພື່ອບໍ່ໃຫ້ຕາຍດ້ວຍຄວາມອຶດຫິວ ກຳມະກອນກະສິກຳຈຳຕ້ອງອອກເດີນທາງ-ໄປສູ່ຕົວເມືອງ, ຫມູ່ບ້ານທີ່ມີໂຮງຈັກໂຮງງານ ແລະກໍກັບກາຍເປັນຄົນຫວ່າງງານຢູ່ໃນທີ່ນັ້ນເອງ.

<u>ຮູບການຫວ່າງງານຊຳເຮື້ອຂອງປະຊາກອນສ່ວນເກີນ</u>ແມ່ນຂະບວນຕົວຈິງຂອງກຳມະກອນທີ່ບໍ່ມີວຽກເຮັດງານທຳຄົງທີ່ (ຊ່າງຫັດຖະກຳຄອບຄົວ,ຜູ້ຫາເຊົ້າກິນຄຳ). ລະດັບຊີວິດການເບັນຢູ່ຂອງຊາວຜູ້ອອກແຮງງານເຫລົ່ານີ້ຕຳ່ກວ່າລະດັບຊີວິດການເປັນຢູ່ຂອງຊົນຊັ້ນກຳມະກອນຫລາຍເທົ່າ.

ນອກຈາກຮູບການຫວ່າງງານຕົ້ນຕໍເຫຼົ່ານີ້ກໍຍັງມີຊັ້ນຄົນຂັ້ນຕຳ່ທີ່ສຸດ ຂອງປະຊາກອນສ່ວນເກີນອີກ ເຊັ່ນ ພວກອັນທະພານເສເພ ແລະ ອື່ນໆ.

ໃນຂະນະທີ່ມີການຂະຫຍາຍຕົວຂອງລະບອບທຶນນິຍົມຈຳນວນ ປະຊາກອນສ່ວນເກີນກໍນັບມື້ນັບເພີ່ມທະວີສູງຂຶ້ນ. ໄພຫວ່າງງານຢູ່ໃນລະບອບທຶນນິຍົມແມ່ນເຫດການຕົວຈິງທີ່ບໍ່ສາມາດປະຕິເສດໄດ້. ດ້ວຍເຫດນີ້ ບັນຫາຈົ່ງຕັ້ງຂຶ້ນ ແກ່ບັນດານັກເສດຖະສາດນາຍທຶນ ໃນການຊີ້ແຈງສາຍເຫດ ແຫ່ງການເກີດແລະການຄົງຕົວຂອງ ໄພຫວ່າງງານ.

"ທິດສະດີ"ກຽດຊັງມະນຸດ ຂອງ ມານຕຸສ

ນັກເສດຖະສາດນາຍທຶນຈຳນວນຫລາຍໄດ້ ພະຍາຍາມອະທິບາຍວ່າການເກີດມີ ໄພຫວ່າງງານແລະຄວາມທຸກຍາກນັ້ນເປັນກົດ ເກນແບບທຳມະຊາດ ແລະ ຕະຫລອດການ. ຫນຶ່ງໃນຈຳນວນນັກເສດຖະ - ສາດເຫລົ່ານັ້ນ ແມ່ນນັກເສດຖະສາດຊາວອັງກິດແລະ ເປັນທັງນັກບວດ ຊື່ວ່າ

ມານຕຸສ ໄດ້ປະກາດທິດສະດີທີ່ປະຕິການທີ່ສຸດ ໃນປີ ๑ກຜຊ. ເນື້ອໃນ ບົດວິ ທະຍານິພົນຕົ້ນຕໍຂອງ ມານຕຸສ ຄືພາຍຫລັງທີ່ສັງຄົມມະນຸດ ໄດ້ເກີດຂຶ້ນ ປະ ຊາກອນກໍເພີ່ມຂຶ້ນຢ່າງທະວີຄູນ ໄປຕາມຕົວເລກເລຂາຄະນິດ (๑,๘,๔, ຊ ແລະ ຕໍ່ໆໄປ) ສ່ວນວັດຖຸປັດໄຈດຳລົງຊີວິດພັດສູງຂຶ້ນໄປຕາມຕົວເລກຄະນິດ (๑,๘,ມ,๔ ແລະ ຕໍ່ໆໄປ) ເນື່ອງຈາກຄວາມຮັ່ງມີຂອງທຳມະຊາດ ມີ ຂອບເຂດຈຳກັດ.

ດ້ວຍສາຍເຫດດັ່ງກ່າວນີ້ ມານຕຸສ ຈຶ່ງໄດ້ໃຫ້ທັດສະນະວ່າ ຂະບວນ ມະ ນຸດຈຳນວນມະຫາສານ ຈຶ່ງກາຍເປັນສ່ວນເກີນຢູ່ໃນໂລກນີ້: ພວກເຂົາເຈົ້າບໍ່ ມີຄວາມສາມາດຫາວຽກເຮັດງານທຳລວມທັງອາຫານການກິນໄດ້ເລີຍ.ບົດສະ ຫລຸບດັ່ງກ່າວຂອງມານຕຸສ ແມ່ນອີງໃສ່ການຄິດໄລ່ ສະຖິຕິຢ່າງຫລອກລວງ ທີ່ ສຸດ.

ພວກນາຍທຶນໄດ້ເຫັນດີກັບ "ທິດສະດີ" ຂອງມານຕຸສ ຢ່າງເປັນຂະບວນ ກໍເພາະວ່າມັນໄດ້ອຳນວຍຄວາມສະດວກໃນການແກ້ຕົວ ແບບປົກປິດຄວາມອະ ທຳຂອງລະບອບທຶນນິຍົມ: ໄພຫວ່າງງານເກີດຂຶ້ນຈາກຈຳນວນກຳມະກອນ ທີ່ ຖີບຕົວຂຶ້ນສູງເກີນປະມານ ສ່ວນຄວາມທຸກຍາກນັ້ນ ເກີດຈາກ "ຜູ້ກິນ" ລົ້ນ ເຫລືອ ແລະ ການຂາດເຂີນປັດໄຈດຳລົງຊີວິດ. ອີງຕາມທັດສະນະຂອງມານ ຕຸສ ຊາວກຳມາຊີບສາມາດປົດປ່ອຍຕົນອອກຈາກໄພຫວ່າງງານ, ຄວາມທຸກ ຍາກ ແລະ ຄວາມອຶດຫິວໄດ້ດ້ວຍວິທີການອົດກັ້ນບໍ່ສ້າງຄອບຄົວ ແລະ ຊອກວິ ທີການຄຸມກຳເນີດແຕ່ບໍ່ແມ່ນດ້ວຍວິທີການລົບລ້າງລະບອບທຶນນິຍົມ. ນອກຈາກ ນີ້ ມານຕຸສ ຍັງຖືວ່າສົງຄາມ, ພະຍາດຕິດແປດຊຳໍ້ເຮື້ອ ແລະ ອື່ນໆເປັນຜົນ ດີແກ່ສັງຄົມມະນຸດ ເພາະວ່າມັນສາມາດທຳລາຍປະລິມານ "ລົ້ນເຫລືອ"ຂອງ ປະຊາກອນ ແລະ ເຮັດໃຫ້ປະຊາກອນ ມີຄວາມສົມດຸນກັບປັດໄຈດຳລົງຊີວິດ.

ມະນຸດທີ່ກ້າວຫນ້າທັງຫລາຍ ຂອງທຸກໆປະເທດ ຕ່າງກໍພ້ອມກັນທຳການຕໍ່ ສູ້ຕ້ານ "ຄຳສອນ" ຂອງມານຕຸສ ຢ່າງເປັນຂະບວນ. ຢູ່ໃນຂະບວນນັກຕໍ່ສູ້ທີ່ ຫາວຫັນຕ້ານທິດສະດີທີ່ຫນ້າລັງກຽດຂອງ ມານຕຸສ ນັ້ນລວມມີທັງນັກປະຊາ ທິ ປະໄຕປະຕິວັດລັດເຊຍເຊັ່ນ ເຊີກນິເຊບສະກີ, ປີສາເຣບ ແລະ ອື່ນໆ.

ຂໍ້ອ້າງອີງທີ່ຫລອກລວງຂອງມານຕຸສ ໄດ້ຖືກເຜີຍແບຢ່າງຈະແຈ້ງ ໂດຍ ມາກ ຢູ່ໃນທິດສະດີ ຂອງທ່ານ ວ່າດ້ວຍ ການສະສົມ ທຶນ. ແຕ່ໃນເວລາ

ດຽວກັນ ທິດສະດີມານຕຸສ ຍັງຄົງຖືກເຜີຍແຜ່ໂຄສະນາຢູ່ໃນໂລກທຶນນິຍົມ ຈົນ ເຖິງເທົ່າປະຈຸບັນ. ພິເສດຢູ່ໃນສະຫະລັດອາເມລິກາ ທິດສະດີດັ່ງກ່າວໄດ້ຮັບ ການເຜີຍແຜ່ຢ່າງກວ້າງຂວາງທີ່ສຸດ. ເຊັ່ນຢູ່ໃນປົ້ມ ຂອງ ຟອກຕ້ ທີ່ມີຊື່ ວ່າ "ເສັ້ນທາງ ໄປສູ່ການກູ້ຊີບ" ໄດ້ຢືນຢັນໄວ້ວ່າ ຢູ່ໃນໂລກນີ້ສາມາດເປັນບ່ອນ ອາໄສຂອງຄົນໄດ້ພຽງແຕ່ ๕๐๐-๗๐๐ ລ້ານຄົນ ນອກນັ້ນ ແມ່ນເປັນ "ເສດ ມະນຸດ" ທີ່ຄວນແກ່ການທຳລາຍຖິ້ມ. ຢູ່ໃນປົ້ມຂອງ ກຸກ ທີ່ມີຊື່ວ່າ "ລະດັບ ຈະເລີນພັນຂອງມະນຸດ-ຄືບັນຫາລຳຄານໃຈສະໄຫມປະຈຸບັນ" ກໍໄດ້ຢືນຢັນວ່າ ການເພີ່ມຂຶ້ນສູງຂອງມວນປະຊາກອນແມ່ນການນາບຂູ່ທີ່ຫນ້າຢ້ານກົວຕໍ່ການຄົງ ຕົວຂອງສັງຄົມມະນຸດ.

ສາຍເຫດອັນແທ້ຈິງແຫ່ງໄພຫວ່າງງານ, ຄວາມທຸກຍາກ ແລະ ຄວາມອຶດ ຫິວຢູ່ໃນລະບອບທຶນນິຍົມໄດ້ຮັບການພິສູດຢ່າງມີວິທະຍາສາດໂດຍບັນດາຜູ້ສ້າງ ຕັ້ງລັດທິມາກ-ເລນິນ. ຍ້ອນແບບວິທີການຜະລິດແບບທຶນນິຍົມ ພ້ອມດ້ວຍ - ຄວາມໂລບມາກໂລພາໃນການສະສົມທຶນນັ້ນເອງ ທີ່ພາໃຫ້ເກີດມີໄພວ່າງງານ, ຄວາມທຸກຍາກ ແລະ ຄວາມອຶດຫິວຂອງຂະບວນຊາວຜູ້ອອກແຮງງານທັງມວນ ເພື່ອຈະຫລີກເວັ້ນຈາກຄວາມທຸກຍາກເຫລົ່ານີ້ ຕ້ອງເຮັດການປະຕິວັດທັບມ້າງ ລະບອບທຶນນິຍົມ. ການຂະຫຍາຍຕົວຂອງບັນດາປະເທດສັງຄົມນິຍົມໄດ້ ພິສູດ ໃຫ້ເຫັນແຈ້ງແລ້ວ ກ່ຽວກັບສະພາບທີ່ກ່າວມາຂ້າງເທິງນີ້.

๘. ກົດເກນລວມແຫ່ງການສະສົມແບບທຶນນິຍົມ

ເນື້ອໃນກົດເກນລວມແຫ່ງ ການສະສົມແບບທຶນນິຍົມ

ການຊຸດໂຊມຂອງສະພາບການເປັນຢູ່ - ຂອງຊົນຊັ້ນກຳມະກອນ, ລະດັບໄພຫວ່າງ ງານທີ່ເພີ່ມສູງຂຶ້ນ ທັງຫມົດບໍ່ແມ່ນ ຍ້ອນ ກົດເກນທຳມະຊາດ ແຕ່ຫາກຍ້ອນກົດເກນການຜະລິດແບບທຶນນິຍົມ. ທ່ານມາກ ໄດ້ຂຽນໄວ້ວ່າ " ຄວາມອຸດົມຮັ່ງມີຂອງສັງຄົມ, ກົດຈະກຳຂອງທຶນ, ຂະ ຫນາດແລະຈັງຫວະການເຕີບໃຫຍ່ຂອງທຶນຫລາຍຂຶ້ນເທົ່າໃດ, ຈຳນວນ ຊາວ ກຳມາຊີບແລະກຳລັງການຜະລິດ ຂອງຊາວກຳມາຊີບ ຍິງຫລາຍຂຶ້ນເທົ່າໃດ,

ຂະບວນແຮງງານສຳຮອງ ຂອງ ອຸດສາຫະກຳ ກໍຍິ່ງຈະຫລາຍຂໍ້ນ ເທົ່ານັ້ນ...ແຕ່ວ່າ ຂະບວນແຮງງານສຳຮອງ ຂອງອຸດສາຫະກຳ ຍິ່ງຫລາຍ ຂໍ້ນເທົ່າໃດເມື່ອທຽບໃສ່ກັບຂະບວນກຳມະກອນທີ່ມີວຽກເຮັດງານທຳ,ມວນປະຊາກອນປົກກະຕິກໍຍິ່ງຂະຫຍາຍກວ້າງອອກເທົ່ານັ້ນ ຊຶ່ງຄວາມທຸກຍາກຂອງເຂົາມີ ສ່ວນກົງກັບການທໍລະມານໃນການໃຊ້ແຮງງານຂອງຂະບວນກຳມະກອນທີ່ ມີ ວຽກເຮັດງານທຳ. ໃນທີ່ສຸດ ຄວາມທຸກຍາກຂອງຊົນຊັ້ນກຳມະກອນ ແລະຂະ ບວນແຮງງານສຳຮອງຂອງອຸດສາຫະກຳຍິ່ງສູງຂໍ້ນເທົ່າໃດ ຄວາມຍາກໄຮ້ຕົວ ຈິງກໍຈະຍິ່ງສູງຂໍ້ນເທົ່ານັ້ນ . <u>ນັ້ຄືກົດເກນລວມ, ຄົບຖ້ວນແຫ່ງການ ສະສົມ ແບບທຶນນິຍົມ</u> " ๑) .

ດັ່ງນັ້ນ ກົດເກນລວມແຫ່ງການສະສົມແບບທຶນນິຍົມ ແມ່ນຢູ່ບ່ອນວ່າ ການ ສະສົມທຶນກໍ່ໃຫ້ເກີດມີການເພີ່ມທະວີຄວາມອຸດົມຮັ່ງມີຢູ່ໃນພາກສ່ວນຫນຶ່ງ ຄືຢູ່ ໃນກຳມີຂອງຊົນຊັ້ນນາຍທຶນ ແລະ ລະດັບໄພຫວ່າງານທີ່ເພີ່ມສູງຂໍ້ນ ແລະ ບໍ່ ຮັບປະກັນຊີວິດການເປັນຢູ່ນັ້ນໄດ້ຕົກຢູ່ໃນພາກສ່ວນຫນຶ່ງອີກ ຄືຕົກເປັນຂອງຊົນ ຊັ້ນກຳມະກອນ. ກົດເກນລວມແຫ່ງການສະສົມແບບທຶນນິຍົມ ແມ່ນ ການສະ ແດງອອກຢ່າງຕົວຈິງຂອງກົດເກນພື້ນຖານຂອງເສດຖະກິດທຶນນິຍົມຄື ກົດເກນ ຂອງຄຸນຄ່າສ່ວນເກີນ. ແມ່ນການຍາດຊິງກັນເພື່ອເພີ່ມທະວີຄຸນຄ່າສ່ວນ ເກີນ ນັ້ນເອງທີ່ເຮັດໃຫ້ເກີດມີການສະສົມຄວາມຮັ່ງມີ, ວັດຖຸອັນຊົງຄຸນຄ່າ ການ ເກາະຫ້ອຍແລະການໃຊ້ຈ່າຍຟູມເຟືອຍຂອງພວກນາຍທຶນທັງຫລາຍ. ການສະ ສົມຄວາມຮັ່ງມີຢູ່ນຳພວກນາຍທຶນຫລາຍຂໍ້ນເທົ່າໃດ ຂະບວນຄົນຫວ່າງງານ ກໍ ຈະຫລາຍຂໍ້ນ, ລະດັບການກົດຂີ່ຂູດຮີດຂອງກຳມະກອນກໍຈະສູງຂໍ້ນ ແລະ ສະ ພາບການເປັນຢູ່ດ້ານວັດຖຂອງພວກເຂົາເຈົ້າ ກໍຈະຊຸດໂຊມລົງເທົ່ານັ້ນ. ສະ ນັ້ນ ການສະສົມທຶນ ແລະ ການຊຸດໂຊມລົງຂອງສະພາບການເປັນຢູ່ຂອງຊາວ ກຳມາຊີບ ແມ່ນສອງດ້ານທີ່ແຍກອອກຈາກກັນບໍ່ໄດ້ຢູ່ໃນສັງຄົມທຶນນິຍົມ.

---

๑) ກ.ມາກ ແລະ ຟ.ອັງແກນ. ບົດນິພົນ,ເຫລັ້ມ ๘ມ,ຫນ້າ ๗๕ຈ.

ການຊຸດໂຊມແບບທຽບຖານແລະ ແບບເດັດຖານຂອງສະພາບການ ເປັນຢູ່ ຂອງຊາວກຳມາຊີບ

ດ້ວຍການເຕີບໃຫຍ່ຂະຫຍາຍ ຕົວ ຂອງລະບອບທຶນນິຍົມນັ້ນເອງ ຈຶ່ງ ເກີດມີ<u>ການຊຸດໂຊມແບບ ທຽບຖານ ຂອງສະພາບການເປັນຢູ່ຂອງ ຊາວ ກຳມາຊີບ</u> ອັນນີ້ຫມາຍຄວາມວ່າ ຈາກການເພີ່ມທະວີຄວາມອຸດົມຮັ່ງມີຂອງສັງຄົມ ອັດຕາສ່ວນຂອງກຳມະກອນໃນຄຸນຄ່າທັງຫມົດຊຶ່ງສ້າງຂຶ້ນໃຫມ່ໃນ ສັງຄົມ (ຫມາຍເຖິງຢູ່ໃນລາຍໄດ້ແຫ່ງຊາດ)ຈະຕົກຕຳ່ລົງ ສ່ວນອັດຕາສ່ວນ ຂອງ ພວກນາຍທຶນຈະເພີ່ມສູງຂຶ້ນ.

ພວກເຮົາເຫັນຄວາມທຸກຍາກຕົວຈິງຂອງຊົນຊັ້ນກຳມະກອນຢູ່ໃນບັນດາປະ ເທດທຶນນິຍົມ ທີ່ຂະຫຍາຍຕົວເຊັ່ນ ສະຫະລັດອາເມລິກາ, ອັງກິດ, ຝະລັ່ງ ແລະ ອື່ນໆ. ຕົວຢ່າງ, ອັດຕາສ່ວນຂອງຊາວຜູ້ອອກແຮງງານຢູ່ໃນລາຍ ໄດ້ ແຫ່ງຊາດຂອງສະຫະລັດອາເມລິກາ ໃນປີ ๑๗๗๐ ມີ ๕๗%, ๑๗๘ມ- ๕% ແລະ ໃນປະຈຸບັນມີຫນ້ອຍກວ່າ ๕๐%.

ຖ້າວ່າອັດຕາສ່ວນຂອງຊົນຊັ້ນກຳມະກອນຢູ່ໃນລາຍໄດ້ແຫ່ງຊາດຫາກຫລຸດ ຕຳ່ລົງ ໃນເວລາດຽວກັນນີ້ ອັດຕາສ່ວນຂອງພວກນາຍທຶນ ກໍຈະຖີບຕົວສູງຂຶ້ນ ຢ່າງບໍ່ຢຸດຢັ້ງ. ຢູ່ໃນສະຫະລັດອາເມລິກາ ຊົນຊັ້ນຂູດຮີດໄດ້ກອບໂກຍ ຫລາຍ ກວ່າເຄິ່ງຫນຶ່ງຂອງລາຍໄດ້ແຫ່ງຊາດທັງໆທີ່ພວກເຂົາເຈົ້າມີຈຳນວນຄົນ ພຽງ ແຕ່ຫນຶ່ງສ່ວນສິບຂອງປະຊາຊົນທັງຫມົດພາຍໃນປະເທດ.

ການຊຸດໂຊມແບບທຽບຖານຂອງສະພາບການເປັນຢູ່ຂອງຊົນຊັ້ນ ກຳມະ ກອນສະແດງອອກຢູ່ໃນການປ່ຽນອັດຕາສ່ວນລະຫວ່າງຄ່າແຮງງານ ແລະ ກຳ ໄລທີ່ສົ່ງຜົນກະທົບກະເທືອນແກ່ຊົນຊັ້ນກຳມະກອນ ແລະ ສົ່ງຜົນດີແກ່ພວກນາຍ ທຶນ.

ກົດເກນລວມແຫ່ງການສະສົມແບບທຶນນິຍົມ ກໍ່ໃຫ້ເກີດມີທ່າອຽງໄປສູ່ການ ຊຸດໂຊມແບບເດັດຖານຂອງສະພາບການເປັນຢູ່ທາງດ້ານວັດຖຂອງຊົນຊັ້ນ ກຳ ມະກອນ.

ຢູ່ໃນລະບອບທຶນນິຍົມ ຊາວກຳມະກອນບໍ່ມີຄວາມຫວັງໃດໆຕໍ່ອະນາຄົດ . ການສະສົມທຶນໄດ້ເຮັດໃຫ້ກຳມະກອນກາຍເປັນຜູ້ຮັບຈ້າງ, ດຶງແກ່ເຂົາ ເຈົ້າ ອອກສູ່ຕະຫລາດແຮງງານ ແລະ ໃນທີ່ສຸດກໍກາຍເປັນເປົ້າຫມາຍຂອງການກົດ

ຂີ່ຂູດຮີດ. ດ້ານຫນຶ່ງ ການສະສົມທຶນໄດ້ນຳເອົາພາກສ່ວນຫລວງຫລາຍ ຂອງ ຊົນຊັ້ນກຳມະກອນໄປສູ່ການອອກແຮງງານຢ່າງຫນັກຫນ່ວງ ແລະທຳການກົດຂີ່ ຂູດຮີດ ຢ່າງຮ້າຍແຮງ ແລະ ອີກດ້ານຫນຶ່ງແມ່ນເກີດມີຂະບວນຄົນຫວ່າງງານ ຂຶ້ນຢ່າງຫລວງຫລາຍ.

<u>ການຊຸດໂຊມແບບເດັດຖານຂອງສະພາບການເປັນຢູ່ຂອງຊາວກຳມາຊີບ-</u> ຫມາຍເຖິງການຊຸດໂຊມທາງດ້ານເງື່ອນໄຂອອກແຮງງານກໍຄືທາງດ້ານ ຊີວິດ ການເປັນຢູ່ຂອງກຳມະກອນ: ອັດຕາຄ່າຄອງຊີບຕົກຕຳ່, ຄ່າຄອງຊີບຖີບຕົວ-ຂຶ້ນສູງ,ຂະບວນຜູ້ຫວ່າງງານເພີ່ມທະວີຂຶ້ນຢູ່ພາຍໃນຕົວເມືອງກໍຄືຊົນນະບົດ , ແຮງງານສຸມເພີ່ມທະວີຂຶ້ນ, ການເຮັດໃຫ້ເງື່ອນໄຂທີ່ພັກພາອາໄສຊຸດໂຊມລົງ ແລະ ອື່ນໆ. ພວກເຮົາມາລອງພິຈາລະນາເບິ່ງ ຈຳນວນຫນຶ່ງໃນຂໍ້ມູນເຫລົ່າ ນີ້.

ຢູ່ຕາມບັນດາປະເທດທຶນນິຍົມຕ່າງໆ ຄ່າຄອງຊີບໄດ້ຖີບຕົວສູງຂຶ້ນ. ເຊັ່ນ ຕົວຢ່າງ, ຖ້າວ່າຕົວເລກໃນປີ ຈພກ0 ຢູ່ສະຫະລັດອາເມລິກາມີ ຈ00,ເມື່ອ ຕົກມາໃນປີ ຈພກຊ ຕົວເລກດັ່ງກ່າວໄດ້ຂຶ້ນຮອດ-ຈຜ້ຊ, ຢູ່ປະເທດອັງກິດ - ຜກ0, ອິດສະຕາລີ-ຜຜ, ໂອຕຣິສ-ຈຜ້ກ, ແອດສະປາຍ-ມ້ຈ0, ຝະລັ່ງ ຜກ0, ຍີ່ປຸ່ນ-ຜຈຈ.

ຢູ່ສະຫະລັດອາເມລິກາ ວິທີການຄິດໄລ່ທາງການກ່ຽວກັບລັກສະນະ ຂີດ ຫມາຍຄວາມທຸກຍາກ (ຢູ່ໃນເອກະສານທາງການຕ່າງໆມັກໃສ່ຊື່ກັນວ່າ "ລະ ດັບຄ່າຄອງຊີບຂະຫນາດຕຳ່ສຸດ") ໄດ້ອີງໃສ່ພື້ນຖານງົບປະມານດ້ານສະບຽງ ອາຫານຂອງແຕ່ລະຄອບຄົວ. ຈາກນີ້ຈົ່ງສັງເກດເຫັນວ່າ ຂອບເຂດ ແຫ່ງ ຄວາມທຸກຍາກຈະເພີ່ມທະວີຂຶ້ນຕາມຂະຫນາດການຖີບຕົວສູງຂອງຄ່າຄອງຊີບ. ເຊັ່ນໃນປີ ຈພຜ້ຜ ຂອບເຂດແຫ່ງຄວາມທຸກຍາກ ໄດ້ເທົ່າກັບ ມ້ຈມ້0 ໂດລາ ຕໍ່ປີສຳລັບຄອບຄົວພາຍໃນຕົວເມືອງທີ່ປະກອບດ້ວຍ ຜ ຄົນ, ເມື່ອຕົກມາໃນປີ ຈພຜ້ພ ມັນໄດ້ຂຶ້ນເຖິງ-ມ້.ກ4ມ້, ປີ ຈພກ6-ຜ.6ກ5 ແລະ ໃນປີ ຈພກ4-ຜ.5ຜ0 ໂດລາ. ຕາມຕົວເລກທາງການໃນປີ ຈພຜ້ພ ຈຳນວນຄົນທີ່ມີ ລາຍ ໄດ້ຕຳ່ກວ່າລັກສະນະຂີດຫມາຍຄວາມທຸກຍາກທີ່ທາງການໄດ້ກຳນົດໄວ້ນັ້ນ ປະ ກອບມີ 6ຜ,ມ້ ລ້ານຄົນ, ປີ ຈພກມ້-6ຜ,5 ລ້ານຄົນ, ປີ ຈພກພ- ມີຮອດ 6ຜ້ ລ້ານ.

ຂໍ້ມູນຕົ້ນຕໍທີ່ພາໃຫ້ເກີດມີທ່າອຽງໄປສູ່ການຊຸດໂຊມແບບດັດຖານຂອງສະພາບການເປັນຢູ່ຂອງຊົນຊັ້ນກຳມະກອນ ຢູ່ໃນລະບອບທຶນນິຍົມນັ້ນ ແມ່ນ ຍອມການຖີບຕົວສູງທາງດ້ານໄພຫວ່າງງານ ຢູ່ໃນບັນດາປະເທດທຶນນິຍົມ ຂະບວນໄພຫວ່າງງານແມ່ນມີ ລັກສະນະຕາຍຕົວແລະຊຳເຮື້ອ. ນອກຈາກຊາວຫວ່າງງານແບບຂາດຕົວແລ້ວ ກໍຍັງມີພາກສ່ວນຊາວຫວ່າງງານນັບເປັນລ້ານໆຄົນທີ່ມີວຽກເຮັດງານທຳແບບບໍ່ເຕັມອາທິດ ແລະບໍ່ເຕັມວັນທຳງານອີກ.

ໃນຕະຫລອດຊຸມປີ ໑໙໗໐ ຂະບວນຊາວຫວ່າງງານຢູ່ຕາມບັນດາປະເທດທຶນນິຍົມຂະຫຍາຍຕົວ ໄດ້ເພີ່ມຂຶ້ນສອງທີ ແລະ ໃນປີ ໑໙໘໐ ມີຮອດ ໑໙ ລ້ານຄົນໃນນັ້ນມີຊາວໜຸ່ມຈຳນວນຫລວງຫລາຍ: ຢູ່ໃນປະເທດຝະລັ່ງ ๕๕%, ອິຕາລີ ๕๔%, ອັງກິດ ๕๐%, ສະຫະພັນເຢຍລະມັນ ๓๓%, ຍີ່ປຸ່ນ ๓๘ %, ສະຫະລັດອາເມລິກາ ๘๕%. ຢູ່ໃນສະຫະລັດອາເມລິກາ ພາຍຫລັງ ສົງຄາມໂລກຄັ້ງທີສອງຈຳນວນຄົນທີ່ຫວ່າງງານຢູ່ຕະຫຼອດເວລາມີ ๘-๓ ລ້ານຄົນ ໃນແຕ່ລະປີ. ຕົກມາໃນປີ ໑໙໘໐ ຕາມຕົວເລກທາງການມີເຖິງ ๗ ລ້ານ ແລະ ຕາມຂໍ້ມູນຂອງພວກກຳມະກອນອາເມລິກາແມ່ນມີ ๑๘ ລ້ານຄົນທີ່ບໍ່ມີວຽກເຮັດງານທຳ.

ໄພຫວ່າງງານແມ່ນຫມາຍເຖິງຄວາມທຸກທໍລະມານທີ່ບໍ່ເປັນພຽງແຕ່ ຂອງຊາວຜູ້ຫວ່າງງານເອງເທົ່ານັ້ນແຕ່ມັນເຮັດໃຫ້ສະພາບການເປັນຢູ່ຂອງ ຊົນຊັ້ນກຳມະກອນທັງຫມົດຊຸດໂຊມລົງ ຍອມວ່າພວກນາຍທຶນສວຍໂອກາດນຳໃຊ້ ໄພຫວ່າງງານເພື່ອທຳການຫລຸດອັດຕາຄ່າແຮງງານຄົນງານລົງ.

ຫນຶ່ງໃນຈຳນວນຕົວເລກທີ່ຊີ້ໃຫ້ເຫັນການດຳລົງຊີວິດໃນລະດັບຕ່ຳຂອງຊົນຊັ້ນກຳມະກອນນັ້ນ ແມ່ນ<u>ຍອມມີການເພີ່ມທະວີແຮງງານສຸມຢ່າງຫນັກຫນ່ວງ</u> ຢູ່ພາຍໃນໂຮງຈັກໂຮງງານທຶນນິຍົມ. ແຮງງານສຸມຄຽງຄູ່ກັບການຂາດ ການປ້ອງກັນຄວາມປອດໄພທາງດ້ານແຮງງານໄດ້ເຮັດໃຫ້ເກີດມີອຸປະຕິເຫດຕ່າງໆ ຂຶ້ນ. ເຊັ່ນຕົວຢ່າງຢູ່ໃນສະຫະລັດອາເມລິກາ ທຸກໆ ๓ ນາທີໃດ ກຳມະກອນຈະເສຍຊີວິດຜູ້ຫນຶ່ງຢູ່ໃນໄລຍະການຜະລິດ ຫລືກາຍເປັນຄົນພິການ ແລະທຸກໆ ๑๑ ວິນາທີໃດຫນຶ່ງໃນຈຳນວນຊາວກຳມະກອນຈະໄດ້ຮັບອຸປະຕິເຫດໃດຫນຶ່ງ.

ໃນເມື່ອເບິ່ງບັນຫາກ່ຽວກັບທ່າອຽງໄປສູ່ຄວາມຊຸດໂຊມ ແບບດັດຖານ ຂອງສະພາບການເປັນຢູ່ຂອງຊົນຊັ້ນກຳມະກອນນັ້ນ ພວກເຮົາກໍຄວນ ຈະເບິ່ງ

ທັງສະພາບຂອງຊາວຜູ້ອອກແຮງງານຢູ່ຕາມບັນດາປະເທດທີ່ມີເສດຖະກິດຫລ້າ ຫລັງ ແລະ ເຄື່ງຫົວເມືອງຂຶ້ນຊົ່ງເປັນບ່ອນທີ່ລະບອບຈັກກະພັດນິຍົມໄດ້ ເຮັດ ໃຫ້ເກີດມີຄວາມທຸກຍາກ ແລະການລົ້ມຕາຍຈຳນວນສູງ; ການລົ້ມຈົມ ຂອງ ຊາວໄຮ່ນາ ແລະ ນາຍຊ່າງຫັດຖະກຳຕ່າງໆ.

ນີ້ຄືຂໍ້ຢັ້ງຢືນແບບລວມໆຂອງສະພາບການເປັນຢູ່ທີ່ຈຸດໂຊມຂອງຊາວຜູ້ອອກ ແຮງງານຢູ່ຕາມບັນດາປະເທດທຶນນິຍົມຕ່າງໆ. ແຕ່ຄວນເຂົ້າໃຈວ່າ ການຈຸດ ໂຊມແບບເດັດຖານຂອງສະພາບການເປັນຢູ່ຂອງຊາວກຳມະກອນມີການ ປ່ຽນ ແປງຢູ່ໂດຍທົ່ວໄປໃນແຕ່ລະປີແຕ່ລະວັນ. ລະດັບການຄອງຊີບຂອງຊາວຜູ້ອອກ ແຮງງານຈຳນວນຫນຶ່ງ ອາດສາມາດສູງຂຶ້ນຢູ່ໃນບາງປະເທດໃດຫນຶ່ງໃນເມື່ອ ວ່າການຄອງຊີບລວມຢູ່ໂລກທຶນນິຍົມຕົກຕຳ່ລົງ ໂດຍທົ່ວໄປ. ໃນການໃຫ້ຂໍ້ລະ ອຽດກ່ຽວກັບສະພາບການເປັນຢູ່ຂອງຊາວຜູ້ອອກແຮງງານຢູ່ໃນບັນດາປະເທດ ທຶນນິຍົມນັ້ນ ບໍ່ຄວນຫລົງລືມວ່າ ການຮັບປະກັນລະດັບອັນໃດຫນຶ່ງຂອງ ການ ເປັນຢູ່ທາງດ້ານວັດຖຂອງຊົນຊັ້ນກຳມະກອນ ຈະຖືກກຳນົດດ້ວຍຄວາມດຸນດ່ຽງ ລະຫວ່າງກຳລັງແຮງຂອງຊົນຊັ້ນນາຍທຶນ ແລະ ກຳມະກອນ. ຕະຫລອດ ປະ ຫວັດສາດທັງຫມົດທີ່ຜ່ານມາຂອງລະບອບທຶນນິຍົມ ຊາວກຳມະກອນໄດ້ທຳການ ຕໍ່ສູ້ຢ່າງຮຸນແຮງເພື່ອຍົກລະດັບການເປັນຢູ່ຂອງຕົນໃຫ້ດີຂຶ້ນ. ການຕໍ່ສູ້ດັ່ງກ່າວ ໄດ້ກາຍເປັນປັດໄຈເພື່ອສະກັດກັ້ນບໍ່ໃຫ້ລະດັບຄອງຊີບຂອງຊົນຊັ້ນກຳມະກອນ-ຕົກຕຳ່.

ໃນຊຸມປີ ຈພກ0 ແລະ ຕົ້ນຊຸມປີ ຈພຊ0 ໄດ້ກາຍເປັນຍຸກສະໄຫມແຫ່ງ-ການເພີ່ມທະວີການຕໍ່ສູ້ເພື່ອປະທ້ວງຂອງຊາວຜູ້ອອກແຮງງານ ຢູ່ຕາມປະເທດ ທຶນນິຍົມຕ່າງໆ. ຄວາມພະຍາຍາມເພື່ອບັນທອນການຕໍ່ສູ້ ຊົນຊັ້ນໂດຍການດຳ ເນີນການປະຕິຮູບທາງດ້ານສັງຄົມໃດຫນຶ່ງນັ້ນ ບໍ່ໄດ້ປະສົບກັບຜົນສຳເລັດ ແຕ່ ຢ່າງໃດເລີຍ. ຈຳນວນຜູ້ເຂົ້າຮ່ວມການປະທ້ວງຕ່າງໆໃນຕະຫລອດ ຊຸມປີ ຈພກ0 ໄດ້ສູງຂຶ້ນຫລາຍກວ່າຫນຶ່ງສ່ວນສາມຄື ຄ5 ລ້ານຄົນຕາມ ຕົວເລກ ທາງການ. ຄວາມຕື່ນຕົວທາງດ້ານການເມືອງຂອງຊົນຊັ້ນກຳມະກອນ ກໍເຕີບ ໃຫຍ່ຂະຫຍາຍຕົວຂຶ້ນຢ່າງລຽນຕົດ.

ບັນດານັກເສດຖະສາດນາຍທຶນ ທີ່ພະຍາຍາມອຸປະໂຫລກຮັກສາ ລະບອບ ທຶນນິຍົມໄວ້ນັ້ນຕ່າງກໍປະດິດຄິດແຕ່ງຫລາຍທິດສະດີດ້ວຍກັນຊົ່ງທັງຫມົດ ແມ່ນ

ล้อมแต่ແນใส่ທັບม้าງຫັນປ່ຽນທິດສະດີຂອງມາກ-ເລນິນ ກ່ຽວກັບການ ຊຸດ ໂຊມແບບທຽບຖານ ແລະ ແບບເດັດຖານຂອງສະພາບການເປັນຢູ່ຂອງຊາວຜູ້ ອອກແຮງງານຢູ່ໃນລະບອບທຶນນິຍົມ. ຫນຶ່ງໃນຈຳນວນທິດສະດີເຫລົ່ານັ້ນແມ່ນ ທິດສະດີວ່າດ້ວຍ "ລະບອບທຶນນິຍົມແຫ່ງປະຊາຊົນ".

ບັນດານັກໂຄສະນາເຜີຍແຜ່ທິດສະດີ "ລະບອບທຶນນິຍົມແຫ່ງປະຊາຊົນ" ໄດ້ປະກາດວ່າ: ອັດຕາຄ່າແຮງງານຂອງຊາວກຳມະກອນຢູ່ໃນລະບອບ ທຶນນິ ຍົມໄດ້ພຸ່ງຂຶ້ນສູງຢ່າງວ່ອງໄວຈົນວ່າຄວາມແຕກຕ່າງທາງດ້ານຊົນຊັ້ນລະຫວ່າງ ຊາວກຳມະກອນ ແລະ ພວກນາຍທຶນກໍຄ່ອຍໆຖືກລົບລ້າງລົງຢ່າງເປັນລຳດັບ. ຊາວກຳມະກອນສາມາດໃຊ້ຄ່າແຮງງານຂອງຕົນຊື້ລົດຍານພາຫະນະ, ເຮືອນ ຢູ່, ຫຸ້ນສ່ວນ, ຝາກເງິນຕາໄວ້ທະນາຄານປະຢັດ ນອກຈາກນັ້ນຢູ່ຕາມ ໂຮງ ຈັກໂຮງງານຫລາຍໆແຫ່ງ ກຳມະກອນຍັງໄດ້ຮັບອັດຕາສ່ວນແບ່ງຈາກ ຜົນກຳ ໄລນຳອີກ. ພວກປ້ອງກັນລະບອບທຶນນິຍົມຕ່າງກໍຢືນຢັນກັນວ່າ "ລະບອບ ທຶນ ນິຍົມແຫ່ງປະຊາຊົນ" ໄດ້ນຳມາຊຶ່ງ "ການປະຕິວັດຢູ່ໃນລາຍໄດ້"ແລະ ຈາກ ຜົນການປະຕິວັດດັ່ງກ່າວໄດ້ບັງເກີດມີ "ການເຮັດໃຫ້ຄວາມແຕກຕ່າງ ລະ ຫວ່າງແບບແຜນການດຳລົງຊີວິດຂອງພວກຮັ່ງ ແລະ ພວກທຸກຫລຸດຫນອຍຖອຍ ລົງ" ແລະຄວາມອຸດົມສົມບູນທາງດ້ານວັດຖຸກໍຖືກແບ່ງປັນຢ່າງສົມສ່ວນ ລະ ຫວ່າງສະມາຊິກຂອງສັງຄົມດ້ວຍກັນ. ຈາກນີ້ກໍລະນີເປັນປໍລະປັກກັນທາງດ້ານ ຊົນຊັ້ນກໍຈະສູນຫາຍໄປໃນຕົວ ແລະ ທິດສະດີມາກ-ເລນິນ ວ່າດ້ວຍການຕໍ່ສູ້- ຊົນຊັ້ນກໍຈະໃຊ້ກັນບໍ່ໄດ້, ເພາະວ່າກຳມະກອນແຕ່ລະຄົນຖ້າວ່າເຂົາຫາກ ດຸ ຫມັ່ນປະຢັດຊັດທ່ຽງໄດ້ດີກໍຈະກາຍເປັນນາຍທຶນໄດ້ເຊັ່ນດຽວກັນ. ແຕ່ວ່າເຫດ ການຕົວຈິງບໍ່ກົງກັບສິ່ງທີ່ກ່າວມາຂ້າງເທິງນັ້ນເລີຍ. ໂດຍອາໄສທິດສະດີຫຼອກ ລວງຈອມປອມເຫລົ່ານີ້ ບັນດານັກໂຄສະນາ "ສັນຕິພາບລະຫວ່າງຊົນຊັ້ນ ", " ຄວາມກົມກຽວກັນຂອງຊົນຊັ້ນ" ໄດ້ພະຍາຍາມດຶງແກ່ເອົາຊາວຜູ້ອອກແຮງ ງານອອກຈາກວົງການຕໍ່ສູ້ເພື່ອສິດຜົນປະໂຫຍດຮາກຖານຊົນຊັ້ນຂອງຕົນ,ສ້າງ ຄວາມແຕກແຍກພາຍໃນຂະບວນການຈັດຕັ້ງກຳມະກອນ, ທຳລາຍມ້າງເພຊົນ ຊັ້ນກຳມະກອນທາງດ້ານແນວຄິດ ແລະ ຊັກຊວນຊາວກຳມະກອນໃຫ້ຫລົງເຊື່ອ ວ່ามີຄວາມອາດສາມາດລົບລ້າງລະບອບທຶນນິຍົມໄດ້ໂດຍປາສະຈາກການປະຕິ ວັດສັງຄົມນິຍົມ.

ທ່າອຽງອັນເປັນປະຫວັດການຂອງ ການສະສົມ ແບບທຶນນິຍົມ

ໂດຍວິເຄາະເບິ່ງການສະສົມ ທຶນ ຢ່າງຮອບດ້ານ ກ.ມາກ ໄດ້ ສະ ແດງໃຫ້ເຫັນເຖິງທ່າອຽງອັນເປັນ ປະຫວັດການຂອງການສະສົມທຶນນິຍົມ. ຈຸດເລີ່ມຕົ້ນຂອງການກຳເນີດກຳມະ-ສິດທຶນນິຍົມ ແມ່ນມາຈາກກຳມະສິດສ່ວນຕົວຂອງຊາວຜູ້ຜະລິດສິນຄ້າຂະຫນາດ ນ້ອຍ.ຕົກມາໃນໄລຍະລະບອບສັກດິນາ ການຜະລິດສິນຄ້າຂະຫນາດນ້ອຍ ກໍ ເລີ່ມສູນຫາຍໄປ ແລະ ເກີດມີພາກສ່ວນທຶນນິຍົມຂຶ້ນແທນ. ແຕ່ຂະບວນ ດັ່ງ ກ່າວຍັງຂະຫຍາຍຕົວຢ່າງຊັກຊ້າທີ່ສຸດ. ໃນໄລຍະການສະສົມທຶນເບື້ອງຕົ້ນ - ນອກຈາກຂະບວນດັ່ງກ່າວນີ້ ຍັງມີການຍຶດເອົາກຳມະສິດຂອງຊາວຜູ້ຜະລິດສິນ ຄ້າຂະຫນາດນ້ອຍຕື່ມອີກ. ຈາກຜົນການເຕົ້າໂຮມດັ່ງກ່າວນີ້ ກຳມະສິດທຶນນິ-ຍົມໄດ້ກາຍເປັນເຈົ້າກຳມະສິດໃນການຄວບຄຸມທັງຫມົດ.

ການພົວພັນແຫ່ງການຜະລິດແບບທຶນນິຍົມ ທີ່ນອນຢູ່ບົນກຳມະສິດສ່ວນ ຕົວ ຂອງນາຍທຶນ ກ່ຽວກັບພາກະນະແຫ່ງການຜະລິດໃນຕອນຕົ້ນ ແຫ່ງການ ຂະ ຫຍາຍຕົວຂອງການພົວພັນນັ້ນ ໄດ້ຊ່ວຍໃຫ້ກຳລັງການຜະລິດໄດ້ເຕີບໃຫຍ່ ຂະ ຫຍາຍຕົວຂຶ້ນຢ່າງວ່ອງໄວ: ການຍົກສູງທາງດ້ານເຕັກນິກ, ເຕົ້າໂຮມ ແຮງ ງານກຳມະກອນຈຳນວນຮ້ອຍໆແລະ ພັນໆຄົນ. ການຜະລິດໄດ້ກາຍເປັນ ຮູບ ການລັກສະນະລວມ.

ຮູບການລັກສະນະລວມຂອງການຜະລິດ ຍິ່ງເພີ່ມທະວີຂຶ້ນຍ້ອນການເຄື່ອນ ໄຫວຂອງກົດເກນເສດຖະກິດຂອງລະບອບທຶນນິຍົມ. ກົດເກນເສດຖະກິດຕົ້ນຕໍ ຂອງລະບອບທຶນນິຍົມ (ກົດເກນຄຸນຄ່າສ່ວນເກີນ) ສ້າງເງື່ອນໄຂສະດວກ ໃນ ການເພີ່ມທະວີການກົດຂີ່ຂູດຮີດຊົນຊັ້ນກຳມະກອນ ແລະ ບົນພື້ນຖານດັ່ງກ່າວກໍ ເພີ່ມທະວີທັງການສະສົມທຶນນຳ. ຢູ່ໃນໄລຍະການສະສົມທຶນນີ້ ໂຄງປະກອບ ຂອງທຶນກໍເຕີບໃຫຍ່ຂຶ້ນຈົ່ງເກີດມີການຜະລິດຂະຫນາດໃຫຍ່ໄປພ້ອມໆກັນ.

ຂະບວນການເຕົ້າໂຮມການຜະລິດໄດ້ເກີດຂຶ້ນພ້ອມໆກັບການຫລຸດຜ່ອນຈຳ ນວນນາຍທຶນລົງ ແຕ່ວ່າຄວາມຮັ່ງມີຂອງສັງຄົມຈຳນວນຫລວງຫລາຍພ້ອມດ້ວຍ ຫມາກຜົນແຮງງານຂອງຊາວຜູ້ອອກແຮງງານນັບເປັນລ້ານໆຄົນ ໄດ້ຕົກໄປ ຢູ່ ໃນກຳມືຂອງພວກເຂົາທັງຫມົດ.

ລະບອບທຶນນິຍົມ ຍິ່ງຂະຫຍາຍຕົວອອກໄປເທົ່າໃດ ຮູບການລັກສະນະ -

ລວມຂອງຂະບວນການຜະລິດ ກໍ່ຍິ່ງຂັດກັບຮູບການກຳມະສິດສ່ວນຕົວແບບທຶນນິຍົມຫລາຍເທົ່ານັ້ນ, ກຳມະສິດສ່ວນຕົວໄດ້ກາຍເປັນອຸປະສັກແກ່ການຂະຫຍາຍຕົວຂອງກຳລັງການຜະລິດ.

ການເຕົ້າໂຮມແຮງງານໂດຍທຶນນັ້ນ ແມ່ນສ້າງເງື່ອນໄຂ ອັນພາວະວິໄສ ໃຫ້ແກ່ການລົ້ມລະລາຍຂອງລະບອບທຶນນິຍົມ. ສະເພາະກົດເກນຂອງລະບອບທຶນນິຍົມເອງກໍ່ຍັງສ້າງເງື່ອນໄຂອັນອັດຕະວິໄສແກ່ການລົ້ມລະລາຍຂອງ ລະບອບທຶນນິຍົມນຳອີກ. ໃນເວລາດຽວກັນກັບການເຕີບໃຫຍ່ຂອງທຶນ ແລະການຂະຫຍາຍຕົວຂອງການຜະລິດນັ້ນ ຊົນຊັ້ນກຳມະກອນກໍເພີ່ມທະວີຂຶ້ນທາງດ້ານ-ປະລິມານ, ພວກເຂົາຖືກເຕົ້າໂຮມກັນເຂົ້າໂດຍການຜະລິດທຶນນິຍົມນັ້ນເອງ. ຊົນຊັ້ນກຳມະກອນກໍເກີດມີການຈັດຕັ້ງ ແລະ ກ້າວໄປສູ່ການເປັນເຈົ້າການ - ຂອງການຜະລິດຢູ່ໃນສັງຄົມໃໝ່ ສັງຄົມນິຍົມ. ຢູ່ໃນໄລຍະການສະສົມ ແບບທຶນນິຍົມນີ້ໄພທ່ວ່າງງານກໍ່ຈະຖີບຕົວສູງຂຶ້ນ, ສະພາບຂອງຊົນຊັ້ນກຳມະກອນ ກໍຍຸດໂຍນລົງ ແລະ ພ້ອມດຽວກັນການຕໍ່ສູ້ກໍ່ຍິ່ງຮຸນແຮງຂຶ້ນ. ຊົນຊັ້ນກຳມະກອນກໍນັບມື້ນັບເຂົ້າໃຈດີ່ວ່າ ມີເສັ້ນທາງດຽວທີ່ຈະຫລຸດພົ້ນອອກຈາກການກົດຂີ່ ຂູດຮີດໄດ້ນັ້ນຄື ເສັ້ນທາງການປະຕິວັດໂດຍທຳລາຍ ລະບອບທຶນນິຍົມ.

ສະນັ້ນ ລະບອບທຶນນິຍົມເອງ ຈຶ່ງເປັນຜູ້ສ້າງເງື່ອນໄຂອັນພາວະວິໄສກໍຄື ອັດຕະວິໄສໃຫ້ແກ່ການທຳລາຍຕົນເອງ. <u>ເນື້ອໃນຂອງທາງອຸດົມຄະຕິ ບ່ະຫວັດການຂອງການສະສົມແບບທຶນນິຍົມແມ່ນການກະກຽມທຸກເງື່ອນໄຂ ອັນຈຳເປັນໃຫ້ແກ່ການຍົກເລີກກຳມະສິດສ່ວນຕົວທຶນນິຍົມ, ໃຫ້ແກ່ການທຳລາຍ ລະບອບທຶນນິຍົມ ແລະ ໃຫ້ແກ່ໄຊຊະນະຂອງລະບອບສັງຄົມນິຍົມ.</u>

ກ.ມາກ ໄດ້ຮຽນໄວ້ວ່າ "ຄຽງຄູ່ກັບການຫລຸດຜ່ອນຈຳນວນພວກນາຍທຶນທີ່ທຳການຍາດຊິ່ງ ແລະ ຜູກຂາດຕໍ່ທຸກໆຜົນປະໂຫຍດ ແຫ່ງຂະບວນຫັນປ່ຽນ-ຂອງທຶນນັ້ນ, ຄວາມທຸກຍາກ, ການຂົບຮັດ, ການເປັນຂ້ອຍຂ້າ, ຄວາມ - ເສື່ອມໂຊມ, ການກົດຂີ່ຂູດຮີດ ກໍເພີ່ມທະວີຂຶ້ນ. ແຕ່ພ້ອມດຽວກັນນັ້ນ ຄວາມບໍ່ເພິ່ງພໍໃຈຂອງຊົນຊັ້ນກຳມະກອນກໍຖີບຕົວສູງຂຶ້ນ, ຈຳນວນທຶນກໍເພີ່ມທະວີຂຶ້ນຢ່າງລຽນຕົ້ດ ທັງຮູ້ທັງຮຽນ, ທັງເຕົ້າໂຮມ ແລະໄດ້ຮັບການຈັດຕັ້ງໃນໄລຍະການຜະລິດທຶນນິຍົມເອງ. ການຜູກຂາດທຶນໄດ້ກາຍເປັນອຸປະສັກໃຫ້ແກ່ແບບວິທີການຜະລິດຊິ່ງໄດ້ເຕີບໃຫຍ່ຂະຫຍາຍຕົວໄປຕາມການຜູກຂາດ ແລະເພື່ອການ

ຜູກຂາດ. ການລວມສູນພາຫະນະການຜະລິດ ແລະ ການເຕົ້າໂຮມແຮງງານ ໄດ້ກ້າວໄປເຖິງບ່ອນບໍ່ສອດຄ່ອງກັນ ກັບເປືອກນອກທຶນນິຍົມ. ເປືອກນອກທຶນ ນິຍົມກໍເຖິງຈຸດລະເບີດຂຶ້ນ. ຊົ່ວໂມງແຫ່ງການອະວະສານຂອງກຳມະສິດສ່ວນ ຕົວທຶນນິຍົມ ມາເຖິງແລ້ວ. ພວກເຈົ້າກຳມະສິດກໍຈະຖືກປົດອອກຈາກການເປັນ ເຈົ້າກຳມະສິດ"[1].

ໃນຕະຫລອດໄລຍະແຫ່ງການຂະຫຍາຍຕົວຂອງປະຫວັດສາດ ການພັງທະ ລາຍແຫ່ງລະບອບທຶນນິຍົມແມ່ນຈະຫລີກເວັ້ນບໍ່ໄດ້ໂດຍເດັດຂາດ. ເຊັ່ນ ໃນປີ ໑ຈ໑ກ ຊົນຊັ້ນກຳມະກອນລັດເຊຍ ໂດຍຄຽງບ່າຄຽງໄຫລ່ກັບຊາວໄຮ່ນາ ທຸກ ຍາກພາຍໃຕ້ການນຳພາຂອງພັກກອມມູນິດຊຶ່ງມີທ່ານ ວ.ອີ.ເລນິນ ເປັນ ຫົວ ຫນ້ານັ້ນ ໄດ້ເຮັດໃຫ້ມະຫາປະຕິວັດສັງຄົມນິຍົມເດືອນຕຸລາເກີດຂຶ້ນ. ໃນ ໄລ ຍະການປະຕິວັດນັ້ນ ຊົນຊັ້ນກຳມະກອນແຫ່ງ ສ.ສ.ສ.ຊ ໄດ້ຍຶດເອົາ ກຳມະ ສິດຊົນຊັ້ນນາຍທຶນລົບລ້າງກຳມະສິດສ່ວນຕົວກ່ຽວກັບພາຫະນະການຜະລິດແລະ ໄດ້ສ້າງຕັ້ງກຳມະສິດສ່ວນລວມສັງຄົມນິຍົມ ກ່ຽວກັບພາຫະນະການຜະລິດ ຂຶ້ນ ແທນ. ພ້ອມດຽວກັນກໍໄດ້ມີການຈັດຕັ້ງການພົວພັນແຫ່ງການຜະລິດແບບ ໃຫມ່ ລະຫວ່າງສະມາຊິກຂອງສັງຄົມດ້ວຍກັນ ຊຶ່ງແມ່ນການພົວພັນການຮ່ວມມື ແລະ ຊ່ວຍເຫລືອຊຶ່ງກັນ ແລະ ກັນແບບສັງຄົມນິຍົມລະຫວ່າງມະນຸດດ້ວຍກັນ ທີ່ຫລຸດ ພົ້ນອອກຈາກການກົດຂີ່ຂູດຮີດ.

ພາຍຫລັງສົງຄາມໂລກຄັ້ງທີສອງ ປະຊາຊົນຂອງຫລາຍໆປະເທດ ກໍໄດ້ ພາກັນກ້າວເດີນໄປຕາມເສັ້ນທາງແຫ່ງການດັດສ້າງອັນພົ້ນຖານ ທາງດ້ານສັງ ຄົມ, ເສດຖະກິດ ເພື່ອກໍ່ສ້າງລະບອບສັງຄົມນິຍົມ.

ຄຳຖາມເພື່ອທວນຄືນ

1. ການຜະລິດສຳເຊີງດ່ຽວ ແລະ ການຜະລິດສຳເປີດກວ້າງແມ່ນຫຍັງ?
2. ໂຄງປະກອບຂອງທຶນແມ່ນຫຍັງ ?
3. ເນື້ອໃນຂອງກົດເກນປະຊາກອນທຶນນິຍົມແມ່ນຫຍັງ ?

---

1) ກ.ມາກ ແລະ ຟ.ອັງແກນ. ບົດນິພົນ, ເຫລັ້ມ ໔ນ,ຫນ້າກຖ໔-ກຖນ.

๔. ສາຍເຫດແຫ່ງການກຳເນີດ ແລະ ຮູບການການຫລ່ຽງງານຢູ່ໃນລະບອບ
ທຶນນິຍົມມີຫຍັງແດ່ ?

๕. ເນື້ອໃນ ຂອງກົດເກນລວມ ແຫ່ງການສະສົມແບບທຶນນິຍົມ ແມ່ນຢູ່ ບ່ອນ
ໃດ ?

๖. ການຈຸດໂຊມ ແບບທຽບຖານ ແລະ ແບບເດັດຖານ ຂອງສະພາບ ການ
ເປັນຢູ່ຂອງຊົນຊັ້ນກຳມະກອນ ຢູ່ໃນລະບອບທຶນນິຍົມ ຢູ່ບ່ອນໃດ ?

๗. ທ່າອຽງອັນເປັນປະຫວັດການຂອງການສະສົມ ແບບທຶນນິຍົມ ເປັນຄືແນວ
ໃດ ?

ພາກ ຫ້າ

ການຫັນປ່ຽນຂອງຄຸນຄ່າສ່ວນເກີນໄປເປັນກຳໄລ ແລະ ການແບ່ງປັນກຳໄລ

ຈ. ການແບ່ງແຍກທຶນອອກເປັນຮູບການສະເພາະຕ່າງໆ

ພວກເຮົາໄດ້ວິເຄາະເບິ່ງການພົວພັນລະຫວ່າງ ຊາວກຳມາຊີບ ແລະນາຍທຶນອຸດສາຫະກຳມາແລ້ວ ຂ້າງເທິງນັ້ນ ແຕ່ຍັງມີກຸ່ມຊົນຊັ້ນຂູດຮີດອື່ນໆເຊັ່ນນາຍທຶນການຄ້າ, ນາຍທະນາຄານ, ນາຍທຶນກະສິກຳ ແລະ ເຈົ້າທີ່ດິນຂະຫນາດ-ໃຫຍ່ຕ່າງໆອີກ. ພວກເຂົາທັງຫມົດເຫລົ່ານີ້ ລ້ວນແຕ່ໄດ້ເຂົ້າຮ່ວມໃນການກົດຂີ່ຂູດຮີດຊົນຊັ້ນກຳມະກອນ ແລະ ກອບໂກຍຄຸນຄ່າສ່ວນເກີນທີ່ໄດ້ມາ ດ້ວຍເຫື່ອແຮງຂອງຊາວກຳມະກອນ. ສາຍເຫດໃນການແບ່ງແຍກພວກນາຍທຶນອອກເປັນແຕ່ລະກຸ່ມສະເພາະນັ້ນ ເກີດມາຈາກເງື່ອນໄຂຂອງການຜະລິດທຶນນິຍົມເອງ.

ສາມໄລຍະແຫ່ງການຫມູນວຽນທຶນ ຍາມໃດທຶນກໍມີການເຄື່ອນໄຫວ ສະເຫມີ. ການຢຸດສະງັກຫລື ການເຄື່ອນໄຫວແບບຊັກຊ້າ ຂອງທຶນ ກໍ່ໃຫ້ເກີດມີຄວາມເສຍຫາຍຢ່າງ ຫນັກຫນ່ວງ ຫລືເຮັດໃຫ້ຄຸນຄ່າສ່ວນເກີນຂອງນາຍທຶນຕົກຕຳ່ລົງ.

ໃນໄລຍະການເຄື່ອນໄຫວນັ້ນ ທຶນໄດ້ຜ່ານໄລຍະຫນຶ່ງ ແລະ ມີຫລາຍ ຮູບການທີ່ແຕກຕ່າງກັນ. ຢູ່ໃນໄລຍະທຳອິດນັ້ນ ທຶນຈະເຄື່ອນໄຫວຢູ່ໃນ ຂົງເຂດ

ການຫມູນອຽນເປັນຮູບເງິນ. ນາຍທຶນໄດ້ເອົາເງິນຈ້ານວນດັ່ງກ່າວນີ້ ໄປຊື້ພາຫະນະການຜະລິດ ແລະແຮງງານຄົນແລະກະກຽມໃສ່ຂະບວນການຜະລິດ-ທຶນນິຍົມ. ການເຄື່ອນໄຫວ ຂອງທຶນ ຢູ່ໃນໄລຍະທຳອິດນີ້ ສາມາດ ວາດພາບອອກໃຫ້ເຫັນດັ່ງຕໍ່ໄປນີ້:

ງ-ສ → ທລ
ງ-ສ → ພຜ

(ງ-ເງິນ ; ສ-ສິນຄ້າ ; ທລ-ແຮງງານຄົນ ; ພຜ-ພາຫະນະ ການຜະລິດ). ສະນັ້ນຢູ່ໃນໄລຍະທຳອິດນີ້ ທຶນໄດ້ປ່ຽນຈາກຮູບການເງິນ ໄປເປັນຮູບການທຶນການຜະລິດ.

ຢູ່ໃນໄລຍະທີສອງ ທຶນຈະເຄື່ອນໄຫວຢູ່ໃນຂົງເຂດການຜະລິດ. ຢູ່ໃນທຶນໄດ້ມີການເຕົ້າໂຮມຊາວກຳມະກອນຮັບຈ້າງເຂົ້າກັບ ພາຫະນະການຜະລິດ. ແຮງງານຂອງກຳມະກອນໄດ້ຜະລິດສ້າງສິນຄ້າອັນໃຫມ່ ທີ່ມີມູນຄ່າອັນ ໃຫມ່ ແລະ ໃນນັ້ນກໍມີມູນຄ່າສ່ວນເກີນນຳ. ການເຄື່ອນໄຫວຂອງທຶນຢູ່ໃນໄລຍະ ນີ້ ສະແດງອອກດ້ວຍ:

ສ → ທລ
ສ → ພຜ ...ຜ...ສ'

ສະນັ້ນ ຢູ່ໃນໄລຍະທີສອງນີ້ ທຶນຈຶ່ງໄດ້ປ່ຽນຮູບການຜະລິດຂອງຕົນເອງ-ໄປເປັນຮູບການທຶນສິນຄ້າແລ້ວ.

ຢູ່ໃນໄລຍະທີສາມ ທຶນໄດ້ກັບໄປເຄື່ອນໄຫວຄືນໃຫມ່ຢູ່ໃນຂົງເຂດ ການຫມູນອຽນ. ຢູ່ໃນທຶນ ແມ່ນມີການສະສາງຈຳໜ່າຍສິນຄ້າທີ່ຖືກຜະລິດຂຶ້ນ ມານັ້ນ. ທຶນສິນຄ້າໄດ້ຫັນປ່ຽນມາເປັນທຶນເງິນອີກ. ການເຄື່ອນໄຫວຂອງທຶນ ຢູ່ໃນໄລຍະນີ້ສະແດງອອກດ້ວຍ:

ສ' - ງ'

ເມື່ອທຶນໄດ້ເລີ່ມການເຄື່ອນໄຫວຢູ່ໃນຮູບການເງິນແລ້ວ ໃນເວລາ ຕໍ່ມາກໍຈະກັບຄືນສູ່ຮູບການເງິນເດີມ ແຕ່ວ່ານາຍທຶນຈະໄດ້ຮັບເງິນຫລາຍກວ່າຕອນທີ່ນັນນຳເຂົ້າສູ່ການຫມູນອຽນເບື້ອງຕົ້ນ. ການເຄື່ອນໄຫວດັ່ງກ່າວຂອງ-

ທຶນກໍຄືການຫັນປ່ຽນຂອງທຶນຈາກຮູບການຢ່າງຫນຶ່ງ ເປັນຮູບການຢ່າງອື່ນແລະ ສາມໄລຍະດັ່ງກ່າວນັ້ນ ເພີ້ນເອີ້ນວ່າ <u>ຮອບຫມູນວຽນຂອງທຶນ.</u> ຮອບຫມູນ - ວຽນຂອງທຶນ ປະກອບດ້ວຍສອງໄລຍະຂອງການຫມູນວຽນ ແລະ ຫນຶ່ງໄລຍະ ຂອງການຜະລິດ.

<u>ຮອບຫມູນວຽນຂອງທຶນ</u>

ຮອບຫມູນວຽນຂອງທຶນເງິນ
ງ - ສ ↗ ຮຄ ↘ ພຜ ...ຜ...ສ' - ງ'

ຮອບຫມູນວຽນຂອງທຶນການຜະລິດ
ຜ...ສ'-ງ'-ສ' ↗ ຮຄ ↘ ພຜ ...ຜ

ຮອບຫມູນວຽນທຶນສິນຄ້າ
ສ'-ງ'-ສ' ↗ ຮຄ ↘ ພຜ ...ຜ'-ສ"

ສະຫລຸບໄດ້ວ່າ ການຜະລິດສຳແບບທຶນນິຍົມ ແມ່ນຄວາມເປັນອັນຫນຶ່ງອັນ ດຽວກັນລະຫວ່າງຂະບວນການຫມູນວຽນ ແລະ ຂະບວນການຜະລິດ. ເຖິງ ວ່າການຜະລິດ ແລະ ການຫມູນວຽນຈະມີຄວາມເປັນອັນຫນຶ່ງອັນດຽວກັນ ກໍ ຕາມ ແຕ່ບົດບາດຕັດສິນແມ່ນຂຶ້ນກັບການຜະລິດ ຍ້ອນວ່າການຜະລິດ ເປັນຜູ້ ສ້າງຄຸນຄ່າສ່ວນເກີນ.

ການກຳເນີດປະເພດທຶນແລະກຸ່ມນາຍທຶນ ມີ ໄລຍະຂອງຮອບ ຫມູນ ວຽນທຶນ ອຸດສາຫະກຳ- ໄດ້ພົວພັນກັບສາມຮູບການທຶນຄື: ທຶນເງິນ, ທຶນການຜະລິດ ແລະທຶນສິນຄ້າ. ໃນໄລຍະແຫ່ງການຂະຫຍາຍຕົວຂອງລະບອບທຶນນິຍົມ ໄດ້ເກີດມີການ ແບ່ງ

ແຍກທົ່ມອອກເປັນແຕ່ລະປະເພດຕ່າງຫາກຫລາຍຢ່ັ. ທົ່ມເພ່ອການຜະລິດ ກໍ ໄດ້ແຍກຕ໊ອອກເປັນທົ່ມການຄ້າ ແລະ ທົ່ມເງິນກູ້ຊ໋ງທ໋ໍາໜ້າທ໋ີ່ຢ່າງເປັ່ນ ເອ ກະລາດຢູ່ໃນຂ໋ງເຂດການຄ້າ ແລະ ສົ່ນເຊ໋ອ. ປະເພດທົ່ມເຫລ່ົ່ານ້ີ ໄດ້ພ໋ອພັ່ນ ເຖ໋ງກຸ່ມນາຍທົ່ມຕ່າງໆເຊ່ັ່ນ: ນັກອຸດສາຫະກໍາ, ນັກທຸລະກ໋ດການຄ້າ, ນາຍ ທະນາຄານ.

ໜ້ໍາທ໋ີ່ຂ໋ງພ໋ວກນາຍທົ່ມອຸດສາຫະກໍາ ແມ່ນຍ໋ດຄ໋ງແຮງງານສ່ວນ ເກ່ັນ ພ້ອມທ້ັງລຸນຄ່າສ່ວນເກ່ັນຂ໋ງຊ໋ນຢ່ັ້ນກໍ່ມາຊ໋ນ. ໜ້ໍາທ໋ີ່ຂ໋ງພ໋ວກນາຍທົ່ມ ການ ຄ້າແມ່ນຫ້ັນທົ່ມການຄ້າໄປເປັ່ນທົ່ມເງິນ. ໜ້ໍາທ໋ີ່ຂ໋ງພ໋ວກນາຍທົ່ມເງິນກູ້ກໍ ແມ່ນເກ໋ບກໍ ແລະ ຈ໋ດວ່າງທົ່ມເງິນ. ແຕ່ລະກຸ່ມຂ໋ງພ໋ວກນາຍທົ່ມເຫລ່ົ່ານ ມ ໄດ້ຮ໋ບອ໋ດຕ່ໍາສ່ວນຂ໋ງໃຜມ໋ນຢູ່ໃນລຸນຄ່າສ່ວນເກ່ັນທ໋ີ່ປະກ໋ບສ່ໍາຢ່ັ້ນໂດຍ ຊ໋ນ ຢ່ັ້ນກໍ່ມະກ໋ນ. ຄຽງຄູ່ກ໋ບກຸ່ມນາຍທົ່ມດ່ໍ້ງກ່ໍາວມ້ານ ກ໋ຍ້ງມ໋ພ໋ວກນາຍທົ່ມ ກະ ສ໋ກໍ່ອ໋ກ. ແຕ່ບ໋ຄ໋ວນແຍກມ໋ນອອກເປັ່ນກຸ່ມສະເພ່າະເລ໋ຍ ເພ່າະວ່າຕ໊ອ້ຈ໋ງກ໋ບ ມ໋ຫ໋ຍ້ງທ໋ີ່ຈະແຕກຕ່າງກ໋ບພ໋ວກນາຍທົ່ມອຸດສາຫະກໍາ.

ຢູ່ພ໋ຍໃນຊ໋ນຢ່ັ້ນຊູດຣ໋ດ ກ໋ຍ້ງມ໋ອ໋ກກຸ່ມໜ້ງ໋ ເຈ້ົ້າທ໋ດ. ເຈ້ົ້າທ໋ດມ໋ບ໋ດ ບາດສະເພ່າະຢູ່ໃນສ້ງ໋ມທົ່ມນ໋ຍົ ເພ່າະວ່າພ໋ວກເຂ໋ົ້າແມ່ນຖ໋ກໍ່ມະສ໋ດ ກ໋ຽວ ກ໋ບໜ້ໍ່ງໃນຈ໋ໍານ໋ວນພ໋ລະເມ໋ືອງທ໋ີ່ສ໋ໍາຄ໋ນ ຄ໋ທ໋ດມ໋ນ໋ນເອ໋ງ. ພ໋ວກເຂ໋ົ້າ ກໍ ໄດ້ຮ໋ບຟ໋ດສ່ວນໜ້ໍ່ງຂ໋ງຕ໋ນຈ໋ກລຸນຄ່າສ່ວນເກ່ັນທ້ັງໜ໋ດເຊ່ັ່ນດ໋ຽວກ໋ນອ໋ກ.

ກຸ່ມນາຍທົ່ມຕ່າງໆທ໋ີ່ມ໋ປະເພດທົ່ມຂ໋ງໃຜມ໋ນເຊ່ັ່ນ-ທົ່ມອຸດສາຫະກໍາ, ການ ຄ້າ, ເງິນກູ້ ແລະ ລ໋ວມທ້ັງເຈ້ົ້າທ໋ດຕ່າງກໍ່ຊ໋ວງຊ໋ງກ໋ນຢ່ໍ່າງລຸດ໋ອດ ເພ່ໍ່ອ ຍາດເອ໋ົ້າລຸນຄ່າສ່ວນເກ່ັນ. ລຸນຄ່າສ່ວນເກ່ັນທ໋ີ່ນາຍທົ່ມໄດ້ຮ໋ບມ້ານ້ັ້ນກ໋ນເປັ່ນ ຮູບກໍ່ໄລ. ພ໋ວກນາຍທົ່ມອຸດສ໋ກະກໍ່ໍາກໍ ໄດ້ຮ໋ບກໍ່ໍາໄລອຸດສາຫະກໍາ, ນັກທຸລະ ກ໋ດການຄ້າ ແມ່ນກໍ່ໍາໄລການຄ້າ, ສ່ວນພ໋ວກນາຍທະນາຄານ ກໍ ແມ່ນ ດ໋ອກ ເບ້ຍເງິນກູ້. ເຈ້ົ້າທ໋ດຂະໜາດໃຫ໋ຍ ກໍ ໄດ້ຮ໋ບດ໋ອກເບ້ຍທ໋ດມ.

๔. ทำไลปานกาง และ ต้นทุนการผะลิต

การใช้จ่ายในการผะลิตและทำไล. มาดตะฐานทำไล

คุนค่าของสินค้าที่ผะลิตยู่ในโรงจักโรงงานทุนนิยมประกอบ ด้วยสามพากส่วนด้วยกันคือ: ๑) c - แม่นคุนค่าทุนถาวรที่ (พากส่วนหนึ่งของคุนค่าเครื่องกืนจัก, อาคาน - โรงงาน, คุนค่าของวัดถุดิบ, เชื้อไฟ และ พากทะนะการผะลิตอื่นๆ ที่ต้องการสำลับขะบวนการผะลิตใดหนึ่ง และ ได้กายเป้นพาก ส่วนหนึ่งของคุนค่าสินค้า ผะลิตอันใหม่); ๒) v - แม่นคุนค่าทุนปรุงและ ม) m - คุนค่าส่วนเกิน.

จากสามพากส่วนเหล่านี้ นายทุนใช้จ่ายพรุงแต่สำลับสองพาก - ส่วนทำอิด และ สองพากส่วนนี้ได้ประกอบเป้นการใช้จ่ายในการ ผะลิตของเขา. <u>การใช้จ่ายในการผะลิตแบบทุนนิยม</u> แม่นการจำละใหแก่ทุนถาวรที่ และ ทุนปรุง (c + v).

ในเมื่อนายทุนได้ทำการขายสินค้าที่ผะลิตยู่ในโรงงานของตนนั้นแล้ว คุนค่าส่วนเกินก็จะกายเป้นส่วนเสกเหลือจากขีดมาดการ ใช้จ่ายในการผะลิตทุนนิยม. ในเวลา ทำมีกละดับลายธับของโรงงานของตนนั้นนายทุนได้สมทรบเบิ่งส่วนเสดเพื่อด่างก่าอใส่กับทุนที่ใช้จ่ายหลีอยกลองหน่าก็สมทรบใส่กับการใช้จ่ายในการผะลิต. คุนค่าส่วนเกินที่นายทุนการใช้ทุนทั่งหมดนั้นคือผันทำไล. <u>ทำไล</u>แม่นคุนค่า ส่วนเกินที่การใช้ทุนทั่งหมดที่เข้าเข้าสู่การผะลิต. ต็อจิงแล้ว ทำไลแม่นคุนค่าส่วนเกิน และ มาจากพากส่วนปรุงอรุมของทุน. สะนั้น การมาก จึงเอ็นทำไลอ่าเป้น <u>รูบการพันปรุงของคุนค่าส่วนเกิน.</u>

ละดับลายธับของโรงงานทุนนิยมจะถูกวัดแทกด้วยมาดตะฐานทำไล. <u>มาดตะฐานทำไล</u> แม่นการการคุนค่าส่วนเกินใช้ ทุนทั่งหมดที่ใช้จ่ายนั้นแล้วจะออกเป้นเปิเซ็น. ต็อย่าง, ต้นทุน (c + v) เท่ากับ ๘๐๐ พันโดลา (๑๒๐ พัน c + ๔๐ พัน v), ส่วนคุนค่าส่วนเกิน (m) ได้ลับ ๔๐ พันโดลาต่อปี, เมื่อนั้นมาดตะฐาน ทำไล

(p') ຈະເປັນດັ່ງນີ້:

$$p' = \frac{m}{c\ v} \times ๑๐๐\% = \frac{๔๐\ \text{ພັນ}}{๖๐๐\ \text{ພັນ}} \times ๑๐๐\% = ๖๐\%$$

ຄວນຄຳນຶງວ່າ ມາດຕະຖານກຳໄລແຕກຕ່າງຈາກມາດຕະຖານຄຸນຄ່າ - ສ່ວນເກີນ. ຢູ່ໃນໂຮງງານໃດກໍຕາມ ມາດຕະຖານກຳໄລຈະຕຳກ່ວ່າມາດຕະຖານຄຸນຄ່າສ່ວນເກີນສະເຫມີ. ຕົວຢ່າງທີ່ກ່າວຂ້າງເທິງນີ້ ມາດຕະຖານ ຄຸນຄ່າສ່ວນເກີນຈະເປັນດັ່ງນີ້:

$$m' = \frac{m}{v} \times ๑๐๐\% = \frac{๔๐\ \text{ພັນ}}{๔๐\ \text{ພັນ}} \times ๑๐๐\% = ๑๐๐\%$$

ມາດຕະຖານກຳໄລ ແມ່ນກຳລັງດັນຂອງການຜະລິດທຶນນິຍົມ. ນັກເຄື່ອນ-ໄຫວກຳມະບານ, ນັກຫນັງສືພິມຊາວອັງກິດໃນກາງສະຕະວັດທີ ๑๗ ຊື່ດັນນິງ ໄດ້ເວົ້າກ່ຽວກັບບົດບາດຂອງມາດຕະຖານກຳໄລຢູ່ໃນລະບອບທຶນນິຍົມນັ້ນວ່າ: "ນາຍທຶນຜູ້ໃດກໍຍິນດີຍອມລົງທຶນຂອງຕົນໃສ່ການຜະລິດທຸກຢ່າງທີ່ຈະບັງເກີດ-ກຳໄລ ແກ່ຕົນໄດ້ໃນ ๑๐%, ຖ້າໄດ້ ๖๐% ເຂົາຍິ່ງຈະພໍໃຈຕໍ່ການຜະລິດດັ່ງ ກ່າວ, ຖ້ານີ ๕๐% ເຂົາຈະບໍ່ຢ້ານກົວຫຍັງຫມົດ, ຖ້າໄດ້ ๑๐๐% ເຂົາ ຈະ ຢຽບຢຳ່ທຸກກົດເກນຂອງມະນຸດ, ຖ້າໄດ້ ນ້໐໐% ເຂົາພ້ອມທີ່ຈະກໍ່ອາດສະຍາ ກຳໄດ້ທຸກຢ່າງ ເຖິງຈະຢູ່ພາຍໃຕ້ການນາບຂູ່ດ້ວຍການແຂວນຄໍກໍຕາມ".[๑]

ການປະຕິບັດພາກຕົວຈິງຂອງພວກນາຍທຶນສະໄຫມປະຈຸບັນ ຢັ້ງຢືນ ເຖິງ ຄຳເວົ້າດັ່ງກ່າວມາຂ້າງເທິງນັ້ນ. ຄວາມຮັ່ງມີ ແລະ ຄວາມເຂັ້ມແຂງ ຂອງ ພວກມະຫາເສດຖີເງິນຕື້ຊາວອາເມລິກາເຊັ່ນພວກມອກເກັນ, ຣອກເຟັນເລີ, ກູຍໂປນ ແມ່ນໄດ້ເກີດມາດ້ວຍການຢຽບຢຳ່ທຸກສິດທິແລະກົດຫມາຍຂອງມະນຸດ ຊາດ.

---

๑) ກ.ມາກ ແລະ ຟ.ອັງແກນ. ບົດນິພົນ, ເຫລັ້ມ ๔ນ, ຫນ້າ ກກ๐.

ການປະກອບສ່ວນມາດຕະຖານກຳໄລ ຂະໜາດ ຜ້ານກາງ ແລະ ຕົ້ນທຶນ ການຜະລິດ

ເສດຖະກິດທຶນນິຍົມປະກອບຂຶ້ນ ດ້ວຍໂຮງຈັກໂຮງງານຕ່າງໆທີ່ ທຳການຜະລິດສິນຄ້ານາໆ ປະ ເພດ. ໂຮງຈັກໂຮງງານທີ່ທຳ ການຜະລິດສິນຄ້າແຕ່ປະເພດດຽວນັ້ນ ຈະມີອັນແຕກຕ່າງກັນຄືທາງດ້ານ ບໍລິ ມາດ, ລະດັບການປະກອບເຕັກນິກນຳໃຊ້ ແລະ ການຈັດຕັ້ງການຜະລິດ.ສະ ນັ້ນຄຸນຄ່າສິນຄ້າແຕ່ລະຢ່າງທີ່ຜະລິດຈາກໂຮງຈັກໂຮງງານແຕ່ລະແຫ່ງກໍຈະມີ-ອັນຕ່າງກັນ. <u>ການຊ່ວງເສັ່ງກັນພາຍໃນຂະແໜງການຜະລິດ</u> ກໍຄືການ ຊ່ວງ ເສັ່ງກັນລະຫວ່າງພວກນາຍທຶນຂອງແຕ່ລະຂະແໜງການຜະລິດ ໄດ້ຮັດໃຫ-ລາຄາສິນຄ້າບໍ່ໄດ້ຮັບການກຳນົດຂຶ້ນດ້ວຍການສູນເສຍແຮງງານຕໍ່ການ ຜະລິດ ສິນຄ້າ ຫລື ຄຸນຄ່າຂອງສິນຄ້າ ແຕ່ລະຢ່າງ ແຕ່ຫາກກຳນົດຂຶ້ນ ດ້ວຍຄຸນຄ່າ ທ່ວງຕະຫລາດຂອງສິນຄ້າເຫລົ່ານັ້ນ.

ຍ້ອນວ່າລາຄາສິນຄ້າຖືກກຳນົດຂຶ້ນດ້ວຍຄຸນຄ່າທ່ວງຕະຫລາດເຊັ່ນນີ້ ແລ້ວ ໂຮງຈັກໂຮງງານ ທີ່ມີເຕັກນິກການຜະລິດ ແລະ ສະມັດຖະພາບແຮງງານສູງ ກໍຈະຢູ່ໃນສະພາບເໝາະສົມດີ ແລະ ກໍຈະໄດ້ຮັບກຳໄລເພີ່ມເຕີມ ຫລືກຳໄລ ສ່ວນເກີນນຳອີກ. ແຕ່ເນື່ອງຈາກມີການຊ່ວງເສັ່ງກັນຢ່າງເສລີ ສະພາບການ ດັ່ງກ່າວ ກໍບໍ່ສາມາດຄົງຕົວດົນນານໄດ້. ຜົນກຳໄລສູງ ໄດ້ສ້າງຄວາມສົນໃຈ ແກ່ໝົດທຸກຄົນ. ພວກນາຍທຶນເຈົ້າຂອງໂຮງຈັກໂຮງງານ ທີ່ມີເຕັກນິກ ການ ຜະລິດຕ່ຳກໍ່ມຸ່ງໝາຍຢາກທຳການປັບປຸງເຕັກນິກ ໃຫ້ມີສະພາບດີຂຶ້ນ, ເພີ່ມ-ທະວີສະມັດຖະພາບ ແລະ ແຮງງານສຸມ ຂອງຊາວກຳມະກອນ. ຈາກ ສາຍ ເຫດດັ່ງກ່າວ ຄຸນຄ່າສິນຄ້າຢູ່ໃນໂຮງຈັກໂຮງງານເຫລົ່ານີ້ຈຶ່ງຫລຸດຕ່ຳລົງ ຈົນ ເຖິງລະດັບຄຸນຄ່າສິນຄ້າແຕ່ລະຢ່າງ ຂອງໂຮງຈັກໂຮງງານຊັ້ນນຳໝາແລະ ຄຸນຄ່ານັ້ນເອງ ທີ່ໄດ້ກາຍເປັນຄຸນຄ່າທ່ວງຕະຫລາດ. ໂຮງຈັກໂຮງງານທີ່ເຄີຍ ໄດ້ຮັບຜົນກຳໄລໃນເມື່ອກ່ອນ ກໍຢຸດຕິບໍ່ໄດ້ຮັບມັນອີກ. ແຕ່ເນື່ອງຈາກມີ ການ ປັບປຸງກັນທາງດ້ານເຕັກນິກ ໂຮງຈັກໂຮງງານຕ່າງໆ ກໍໄດ້ມີເງື່ອນໄຂຮັບຜົນ ກຳໄລສ່ວນເກີນຄືນໃໝ່ອີກ.

ຄຽງຄູ່ກັບການຊ່ວງເສັ່ງກັນພາຍໃນຂະແໜງການຜະລິດຢູ່ໃນສັງຄົມ ທຶນ ນິຍົມແລ້ວ ກໍຍັງມີ<u>ການຊ່ວງເສັ່ງກັນລະຫວ່າງຂະແໜງການຜະລິດ</u>ອີກ ໝາຍ

ຄວາມວ່າ ການຊ່ວງເສັງກັນ ລະຫວ່າງພວກນາຍທຶນ ທີ່ໄດ້ລົງທຶນ ໃນຂະແຫນງການຜະລິດ ທີ່ແຕກຕ່າງກັນ. ການຊ່ວງເສັງດັ່ງກ່າວ ໄດ້ເຮັດໃຫ້ມາດຕະຖານກຳໄລຢູ່ຕາມແຕ່ລະຂະແຫນງການຜະລິດ ທີ່ແຕກຕ່າງກັນນັ້ນ ມີ ສ່ວນເທົ່າທຽມກັນ.

ພວກເຮົາຈົ່ງມາພິຈາລະນາເບິ່ງວ່າ ຄວາມເທົ່າທຽມກັນລະຫວ່າງ ມາດຕະຖານກຳໄລ ຂອງພວກນາຍທຶນ ເກີດມີຂຶ້ນໄດ້ຄືແນວໃດ. ພວກເຮົາ ຂໍສົມມຸດວ່າ ຢູ່ໃນສັງຄົມມີສາມຂະແຫນງການຜະລິດດ້ວຍກັນຄື: ຂະແຫນງການຜະລິດຫນັງດິບ, ຕຳ່ແຜ່ນ ແລະ ເຄື່ອງກົນຈັກກໍ່ສ້າງ. ຢູ່ໃນຂະແຫນງການ ຜະລິດເຫລົ່ານີ້ ມີການລົງທຶນດ້ວຍບໍລິມາດດຽວກັນ ແຕ່ໂຄງປະກອບຂອງທຶນແຕກຕ່າງກັນ. ສົມມຸດວ່າ ບໍລິມາດຕົ້ນທຶນຢູ່ໃນແຕ່ລະຂະແຫນງການຜະລິດດັ່ງກ່າວນີ້ເທົ່າກັບ ๑๐๐ ຫົວຫນ່ວຍ (ຕົວຢ່າງຕົ້ໂດລາ). ຕົ້ນທຶນໃນອຸດສາຫະກຳ - ຫນັງດິບປະກອບດ້ວຍ ກ๐ ຫົວຫນ່ວຍຂອງທຶນຄົງທີ່ ແລະ ຮ๐ ຫົວຫນ່ວຍຂອງທຶນປ່ຽນ, ໃນອຸດສາຫະກຳຕຳ່ແຜ່ນ ຊ๐ ຫົວຫນ່ວຍຂອງທຶນຄົງທີ່ ແລະ ຜ๐ ຫົວຫນ່ວຍຂອງທຶນປ່ຽນ, ໃນອຸດສາຫະກຳເຄື່ອງກົນຈັກກໍ່ສ້າງ ຝ๐ ຫົວຫນ່ວຍຂອງທຶນຄົງທີ່ ແລະ ๑๐ ຫົວຫນ່ວຍ ຂອງທຶນປ່ຽນ. ສົມມຸດວ່າ ມາດຕະຖານຄຸນຄ່າສ່ວນເກີນຢູ່ໃນແຕ່ລະຂະແຫນງ ມີ ๑๐๐%. ດັ່ງນັ້ນຈຶ່ງເຫັນໄດ້ວ່າ ຢູ່ໃນອຸດສາຫະກຳຫນັງດິບຈະຖືກຜະລິດໄດ້ ຮ๐ ຫົວຫນ່ວຍຄຸນຄ່າສ່ວນເກີນ , ຢູ່ອຸດສາຫະກຳຕຳ່ແຜ່ນໄດ້ ຜ๐ ແລະ ອຸດສາຫະກຳເຄື່ອງກົນຈັກກໍ່ສ້າງ ๑๐ ຫົວຫນ່ວຍ. ມູນຄ່າຂອງສິນຄ້າຢູ່ໃນຂະແຫນງການທຳອິດຈະເທົ່າກັບ ๑ຮ๐ , ຂະແຫນງການທີສອງ-๑ຜ๐, ຂະແຫນງການທີສາມ-๑๑๐ ແລະລວມຫມົດທັງສາມຂະແຫນງການກໍຈະເທົ່າກັບ-ຮຜ๐ ຫົວຫນ່ວຍ.

ສົມມຸດຕໍ່ໄປອີກວ່າ ຖ້າສິນຄ້າ ຫາກຖືກຂາຍ ຕາມຄຸນຄ່າແລ້ວ ໃນເມື່ອນັ້ນຢູ່ໃນອຸດສາຫະກຳຫນັງດິບ ມາດຕະຖານກຳໄລຈະມີ ຮ๐%, ຕຳ່ແຜ່ນ-ຜ๐ ແລະ ເຄື່ອງກົນຈັກກໍ່ສ້າງ-๑๐%. ສິ່ງດັ່ງກ່າວເປັນຜົນດີແກ່ພວກນາຍທຶນ ຂະແຫນງການຫນັງດິບແຕ່ບໍ່ເປັນຜົນດີໃຫ້ແກ່ພວກນາຍທຶນຂະແຫນງການເຄື່ອງກົນຈັກກໍ່ສ້າງ. ເພື່ອຍາດຊິງເອົາຜົນກຳໄລນັ້ນ ພວກນາຍທຶນຂະແຫນງການ - ເຄື່ອງກົນຈັກກໍ່ສ້າງ ຈະຍົກຍ້າຍເອົາ ທຶນຂອງຕົນອອກຈາກການກໍ່ສ້າງເຄື່ອງກົນຈັກໄປສູ່ການຜະລິດຫນັງດິບ. ຈາກສາຍເຫດນີ້ ອຸດສາຫະກຳຫນັງດິບ ຈຶ່ງ

ຈະທຳການຜະລິດສິນຄ້າອອກຫລາຍກວ່າຄວາມຕ້ອງການຕົວຈິງທີ່ມີຕໍ່ ສິນຄ້ານັ້ນ. ລາຄາສິນຄ້າຫນັງດິບກໍຈະຫລຸດຕຳ່ລົງ ແລະ ພ້ອມດຽວກັນ ມາດຕະ - ຖານກຳໄລກໍຈະຕົກຕຳ່ລົງເຊັ່ນດຽວກັນຕົວຢ່າງຮອດ ๘๐%.

ໃນເວລາດຽວກັນ ການຜະລິດເຄື່ອງກົນຈັກກໍ່ສ້າງ ກໍຈະຫລຸດຫນ້ອຍຖອຍ ລົງໃນເມື່ອຄວາມຕ້ອງການຕໍ່ຜົນຜະລິດຍັງຄົງຕົວຢູ່ເຊັ່ນເດີມ. ການປ່ຽນແປງ ລະຫວ່າງການສະເຫນີ ແລະ ການຕອບສະຫນອງກໍສາມາດເຮັດໃຫ້ເຈົ້າຂອງ ຜະລິດເພີ່ມລາຄາຕໍ່ສິນຄ້າເຄື່ອງກົນຈັກກໍ່ສ້າງຂຶ້ນ ແລະ ມາດຕະຖານກຳໄລກໍ ຈະສູງຂຶ້ນນຳເຊັ່ນຕົວຢ່າງຈາກ ๑๐ ເຖິງ ๘๐%.

ດັ່ງນັ້ນ ການຍົກຍ້າຍທຶນຈາກຂະແຫນງການຫນຶ່ງ ໄປສູ່ຂະແຫນງການອື່ນ ເຮັດໃຫ້ມາດຕະຖານກຳໄລສົມດຸນກັນ ໃນຂະຫນາດຜ້ານກາງ. <u>ກຳໄລ ຜ້ານ ກາງແມ່ນກຳໄລເທົ່າກັນຕໍ່ຕົ້ນທຶນທີ່ມີບໍລິມາດດຽວກັນທີ່ໃຊ້ເຂົ້າໃນ ຂະແຫນງ ການຜະລິດທີ່ແຕກຕ່າງກັນ.</u> ຈາກການເກີດມີມາດຕະຖານກຳໄລຂະຫນາດ - ຜ້ານກາງນີ້ ສິນຄ້າຈະບໍ່ຖືກຂາຍຕາມຄຸນຄ່າ (c + v + m) ແຕ່ຈະ ຖືກ ຂາຍຕາມລາຄາທີ່ໄດ້ມາຈາກການໃຊ້ຈ່າຍໃນການຜະລິດ ແລະ ຈາກ ກຳໄລ ຂະຫນາດຜ້ານກາງ (c + v + p) . ລາຄາທີ່ເທົ່າທຽມກັບການ ໃຊ້ ຈ່າຍໃນການຜະລິດສິນຄ້າ ບວກກັບກຳໄລຂະຫນາດຜ້ານກາງນັ້ນ ເອີ້ນວ່າ<u>ຕົ້ນ ທຶນການຜະລິດ.</u>

ການເທົ່າທຽມກັນຂອງມາດຕະຖານກຳໄລ ທີ່ແຕກຕ່າງກັນໃນຂະຫນາດ- ຜ້ານກາງ ແລະ ຂະບວນການກຳເນີດຂອງຕົ້ນທຶນ ການຜະລິດນັ້ນ ສາມາດ ສະແດງອອກດ້ວຍຕາຕະລາງ (ເບິ່ງຫນ້າ 151).

ຈາກຕາຕະລາງດັ່ງກ່າວນີ້ ຊີ້ໃຫ້ເຫັນວ່າ ມາດຕະຖານທີ່ແຕກຕ່າງ ກັນ ຂອງກຳໄລແມ່ນເທົ່າທຽມກັນ ໃນມາດຕະຖານຂະຫນາດຜ້ານກາງ ຂອງ ກຳ ໄລ. ຕົ້ນທຶນການຜະລິດຂຶ້ນໆລົງໆຈາກຄຸນຄ່າສິນຄ້າ. ຢູ່ໃນຂະແຫນງຫນຶ່ງລາ ຄາຂຶ້ນສູງກວ່າຄຸນຄ່າ ແລະ ຢູ່ໃນຂະແຫນງອື່ນ ພັດຕົກຕຳ່ລົງກວ່າຄຸນຄ່າ.

ຢູ່ບັນດາຂະແຫນງການໃດທີ່ມີໂຄງປະກອບຂອງທຶນຕຳ່ (ຢູ່ໃນ ຕົວຢ່າງ ຂອງພວກເຮົາ ແມ່ນອຸດສາຫະກຳຫນັງດິບ) ຕົ້ນທຶນການຜະລິດຈະຕຳ່ກວ່າຄຸນ ຄ່າ ສ່ວນກຳໄລກໍຈະຫນ້ອຍກ່ວາຄຸນຄ່າສ່ວນເກີນ. ຢູ່ໃນບັນດາຂະແຫນງ ການ ໃດທີ່ມີໂຄງປະກອບຂອງທຶນຂະຫນາດກາງ ຕົ້ນທຶນການຜະລິດຈະກົງກັບຄຸນຄ່າ

๑๕	๐๕	๐๕	๐๕	๐๕	๐๕	๐๕	๐๕	๐๕	๐๕
๐๗	๐๗	๐๗	๐๗	๐๗	๐๗	๐๗	๐๗	๐๗	๐๗
๐๙	๐๙	๐๙	๐๙	๐๙	๐๙	๐๙	๐๙	๐๙	๐๙

ส่วนใดส่วนหนึ่ง ຂອງຊາວກຳມະກອນ, ການຕໍ່ສູ້ກັບພວກນາຍທຶນໃດຫນຶ່ງບໍ່ສາມາດນຳໄປ ສູ່ການປ່ຽນແປງສະພາບການເປັນຢູ່ຂອງຊົນຊັ້ນກຳມະກອນໄດ້ຢ່າງເຖິງກົກເຖິງປາຍເລີຍ. ຊົນຊັ້ນກຳມະກອນຈະສາມາດປົດປ່ອຍຕົນ ອອກຈາກແອກຄອບຄອງ ຂອງທຶນໄດ້ ກໍດ້ວຍການທັບມ້າງຫມົດລະບົບການກົດຂີ່ຂູດຮີດທຶນນິຍົມເທົ່ານັ້ນ. ດັ່ງນັ້ນ ທິດສະດີມາກ ວ່າດ້ວຍກຳໄລຂະຫນາດຜ້ານ ກາງຈຶ່ງມີຄວາມຫມາຍທາງດ້ານການເມືອງຢ່າງໃຫຍ່ຫລວງ ສຳລັບການ ຕໍ່ສູ້ຊົນຊັ້ນຂອງຊາວກຳມາຊີບ.

ຄືດັ່ງທີ່ພວກເຮົາໄດ້ເວົ້າຢ່າງຈະແຈ້ງແລ້ວວ່າ ສິນຄ້າຢູ່ໃນລະບອບທຶນນິ-ຍົມ ຈະບໍ່ຖືກຂາຍຕາມຄຸນຄ່າຂອງມັນ ແຕ່ຕາມຕົ້ນທຶນການຜະລິດ. ແຕ່ໃນເວ ລາດຽວກັນ ຕ້ອງເຂົ້າໃຈວ່າ ກົດເກນຄຸນຄ່າຍັງຄົງປະຕິບັດກັນຢູ່ເຊັ່ນເດີມ . ຕົ້ນທຶນການຜະລິດ ແມ່ນຮູບການປ່ຽນແປງຢ່າງຫນຶ່ງຂອງຄຸນຄ່າ. ພວກ ນາຍ ທຶນຈຸຫນຶ່ງ ອາດຈະຂາຍສິນຄ້າຂອງຕົນຕາມລາຄາ ທີ່ສູງກວ່າຄຸນຄ່າ, ສ່ວນຈຸ ອື່ນ ຕຳກວ່າ, ແຕ່ພວກນາຍທຶນທັງຫມົດຍັງຄົງໄດ້ຮັບຄຸນຄ່າສິນຄ້າຢ່າງ ເຕັມ ສ່ວນ ແລະ ກຳໄລຂອງຫມົດທົ່ວຊົນຊັ້ນນາຍທຶນ ຈະກົງກັບບໍລິມາດຄຸນຄ່າສ່ວນ ເກີນທັງຫມົດ ທີ່ຜະລິດຢູ່ໃນສັງຄົມນັ້ນ. ຢູ່ໃນຂອບເຂດສັງຄົມທັງຫມົດຈຳນວນ ຕົ້ນທຶນການຜະລິດຈະເທົ່າກັບຈຳນວນຄຸນຄ່າສິນຄ້າ, ສ່ວນບໍລິມາດກຳໄລ ຈະ ເທົ່າກັບບໍລິມາດທັງຫມົດຂອງຄຸນຄ່າສ່ວນເກີນ. ດ້ວຍເຫດນີ້ <u>ກົດເກນຄຸນຄ່า-ຈຶ່ງເຄື່ອນໄຫວໂດຍຜ່ານຕົ້ນທຶນການຜະລິດ.</u>

ທ່າອຽງຂອງມາດຕະຖານກຳໄລ ໄປສູ່ການ ຕົກຕຳ່

ຈາກການຂະຫຍາຍຕົວຂອງລະບອບ ທຶນນິຍົມ ໂຄງປະກອບຂອງທຶນ ໄດ້ ເພີ່ມທະວີສູງຂຶ້ນ. ຫມາຍຄວາມວ່າ ບໍລິມາດວັດຖຸ, ປະລິມານເຄື່ອງກົນຈັກອຸປະກອນຕ່າງໆ ໄດ້ເພີ່ມສູງຂຶ້ນຢູ່ພາຍ ໃນໂຮງຈັກໂຮງງານ. ປະລິມານຊາວກຳມະກອນກໍເພີ່ມສູງຂຶ້ນເຊັ່ນດຽວ ກັນ ແຕ່ຫາກຍັງຢູ່ໃນລະດັບຊ້າ. ເພາະສະນັ້ນ ທຶນປ່ຽນຈຶ່ງຖີບຕົວຂຶ້ນຊ້າກ່ວາ ທຶນ ຄົງທີ່. ແຕ່ວ່າໂຄງປະກອບຂອງທຶນສູງຂຶ້ນເທົ່າໃດ ມາດຕະຖານກຳໄລ ກໍຈະ ຕຳ່ລົງເທົ່ານັ້ນ ແຕ່ບໍ່ໄດ້ຫມາຍຄວາມວ່າບໍລິມາດກຳໄລຈະຕົກຕຳ່ລົງ. ພວກ ເຮົາຂໍຍົກເອົາຕົວຢ່າງດັ່ງນີ້. ຕົ້ນທຶນລວມມີ ๑๐๐ ຕື້ໂດລາຊຶ່ງປະກອບ ດ້ວຍ

ກຸ0 c + ຂ0 v ໃນໄລຍະ ໄ0 ປີໄດ້ເພີ່ມສູງຂຶ້ນຕື່ມສອງເທື່ອຄືເຖິງ ໄ00 ຕື້ໂດລາ. ໂຄງປະກອບຂອງມັນ ກໍຈະສູງຂຶ້ນ ແລະ ກາຍເປັນ ຈຂ0 c +ຄ0 v . ດ້ວຍມາດຕະຖານຄຸນຄ່າສ່ວນເກີນ ຈ00% ໃນກໍລະນີທຳອິດ ບໍລິມາດກຳໄລຈະເທົ່າກັບ ຂ0 ຕື້ ແລະ ຢູ່ໃນກໍລະນີທີສອງ ຄ0 ຕື້ໂດລາ. ໃນ ເວລາດຽວກັນ ມາດຕະຖານກຳໄລໄດຫລຸດລົງຈາກ ຂ0 ຮອດ ໄ0%. ການຕົກຕຳ່ຂອງມາດຕະຖານກຳໄລຈະຫລີກເວັ້ນບໍ່ໄດ້ເຊັ່ນດຽວກັນກັບການຖີບຕົວ ຂຶ້ນສູງຂອງໂຄງປະກອບຂອງທຶນ ກໍຈະຫລີກເວັ້ນບໍ່ໄດ້ເຊັ່ນດຽວກັນ. ນອກຈາກນີ້ ກໍຍັງມີຫລາຍປັດໄຈທີ່ກີດຂວາງການຕົກຕຳ່ດັ່ງກ່າວ.

ປັດໄຈສຳຄັນທີ່ກີດຂວາງການຕົກຕຳ່ທາງດ້ານມາດຕະຖານກຳໄລນັ້ນແມ່ນການເພີ່ມທະວີລະດັບການກົດຂີ່ຂູດຮີດ ຊາວກຳມະກອນ. ພວກເຮົາຂໍຢ້ອນຄືນຫາຕົວຢ່າງຂອງພວກເຮົາອີກ. ສົມມຸດວ່າ ລະດັບການກົດຂີ່ຂູດຮີດຢູ່ໃນກໍລະນີທີສອງນັ້ນ ເພີ່ມສູງຂຶ້ນ ບໍລິມາດກຳໄລເທົ່າກັບ ໄ00%. ບັດນີ້ກຳໄລຈະ ໄດ້ຮັບເປັນ ຊ0 ຕື້ໂດລາ ສ່ວນມາດຕະຖານກຳໄລ ຈະເທົ່າກັບ $\frac{ຊ0}{ຈຂ0+ ຄ0}$ × ຈ00 % = ຄ0%. ດ້ວຍເຫດນີ້ ການເພີ່ມທະວີການກົດຂີ່ຂູດຮີດຊົນຊັ້ນກຳມະກອນຈຶ່ງໄດ້ນຳໄປສູ່ການເພີ່ມທະວີທາງດ້ານມາດຕະຖານກຳໄລ.

ນອກຈາກນີ້ ກໍຍັງມີປັດໄຈອື່ນໆອີກ ທີ່ກີດຂວາງການຕົກຕຳ່ທາງດ້ານມາດຕະຖານກຳໄລເຊັ່ນ: ອັດຕາຄ່າແຮງງານຕົກຕຳ່ລົງກວ່າຄຸນຄ່າແຮງຄົນ, ການປະຢັດທຶນຄົງທີ່ຊຶ່ງທັງຫມົດໄດ້ຫັກເອົາອອກຈາກບ້ວງການໃຊ້ຈ່າຍ ເພື່ອປົ່ນປົວສຸຂະພາບແລະຊີວິດຂອງຊາວກຳມະກອນ ແລະ ອື່ນໆອີກ.

ປັດໄຈທັງຫມົດເຫລົ່ານີ້ ບໍ່ໄດ້ລົບລ້າງການຕົກຕຳ່ທາງດ້ານມາດຕະຖານ-ກຳໄລແຕ່ຢ່າງໃດ, ພຽງແຕ່ເຮັດໃຫ້ອ່ອນເພຍ ແລະສ້າງສະພາບໃຫ້ເກີດ ມີ <u>ທ່າອຽງ</u> ເທົ່ານັ້ນ.

ທ່າອຽງຂອງມາດຕະຖານກຳໄລ ໄປສູ່ການຕົກຕຳ່ໄດ້ເຮັດໃຫ້ຂໍ້ຂັດແຍ່ງ-ທຶນນິຍົມເກີດ ຮຸນແຮງຂຶ້ນ. ການຂັດແຍ່ງລະຫວ່າງຊາວກຳມາຊີບ ແລະພວກນາຍທຶນ ກໍເຕີບໃຫຍ່ຂຶ້ນ ຍ້ອນວ່າເພື່ອຢັບຢັ້ງການຕົກຕຳ່ຂອງມາດຕະຖານກຳໄລ ພວກນາຍທຶນໄດ້ເພີ່ມທະວີການກົດຂີ່ຂູດຮີດຊົນຊັ້ນກຳມະກອນ. ຢູ່ພາຍໃນ ພວກນາຍທຶນເອງ ກໍເກີດມີຂໍ້ຂັດແຍ່ງຂຶ້ນເຊັ່ນດຽວກັນ. ພວກນາຍທຶນ ພາກັນ ສຸມການລົງທຶນໃສ່ຂະແຫນງການຜະລິດທີ່ມີມາດຕະຖານ ກຳໄລສູງ. ສິ່ງດັ່ງ

ກ່າວໄດ້ນຳໄປສູ່ການຊ່ວງເສັງກັນ ຢ່າງດຸເດືອດ ລະຫວ່າງພວກນາຍທຶນດ້ວຍກັນ ແລະ ໃນບັ້ນສຸດທ້າຍ ຝ່າຍຫນຶ່ງ ກໍຖືກປະລາໄຊລົ້ມລະລາຍໄປ ສ່ວນອີກຝ່າຍຫນຶ່ງ ກໍຮັ່ງມີຂຶ້ນຢ່າງເປັນລຳດັບ. ນອກນີ້ ກໍຍັງມີການຂັດແຍ່ງລະຫວ່າງຊາດມະຫາອຳນາດທຶນນິຍົມນຳອີກ. ໃນການຍາດຊິງເອົາ ມາດຕະຖານ ກຳໄລ ສູງກວ່ານັ້ນ ເງິນທຶນ ກໍຖືກເລັ່ງໄປສູ່ບັນດາປະເທດທີ່ຫລ້າຫລັງ ທາງດ້ານເສດຖະກິດ (ບ່ອນທີ່ແຮງຄົນ ມີລາຄາຖືກ ແລະ ໂຄງປະກອບຂອງ ທຶນຕຳ່) ແລະ ໄປສູ່ປະເທດອື່ນໆອີກ ລວມທັງບັນດາປະເທດທີ່ຂະຫຍາຍຕົວ.

ໂດຍເຮັດໃຫ້ການຂັດແຍ່ງຂອງລະບອບທຶນນິຍົມຮຸນແຮງຂຶ້ນນັ້ນ <u>ກົດເກນ-ທ່າອຽງຂອງມາດຕະຖານກຳໄລໄປສູ່ການຕົກຕຳ່</u> ໄດ້ບົ່ງບອກເຖິງການຈຳກັດທາງດ້ານປະຫວັດສາດຂອງແບບວິທີການຜະລິດທຶນນິຍົມ ແລະ ຊີ້ແຈງວ່າ ລະບອບນີ້ມີລັກສະນະຊົ່ວຄາວ.

ນ. ກຳໄລການຄ້າ

ທຶນອຸດສາຫະກຳແລະທຶນການຄ້າ ຄຸນຄ່າສ່ວນເກີນເກີດມີຂຶ້ນໄດ້ຈາກແຮງງານຂອງຊົນຊັ້ນກຳມະກອນ-ໃນໄລຍະການຜະລິດ. ກ່ອນອື່ນຫມົດ ແມ່ນພວກນາຍທຶນອຸດສາຫະກຳຊຶ່ງເປັນເຈົ້າຂອງໂຮງຈັກໂຮງງານ ທີ່ຈະໄດ້ຮັບຄຸນຄ່າສ່ວນເກີນນີ້. ກຸ່ມຊົນຂູດຮີດອື່ນອື່ນລວມທັງພວກນາຍທຶນການຄ້າ ຈະໄດ້ຮັບຄຸນຄ່າສ່ວນເກີນຈາກພວກນາຍທຶນອຸດສາຫະກຳ. ເປັນຫຍັງ ທຶນອຸດສາຫະກຳຈຶ່ງປ່ອຍປະສ່ວນຫນຶ່ງຂອງຄຸນ ຄ່າສ່ວນເກີນໃຫ້ແກ່ທຶນການຄ້າ ? ຢູ່ໃນເສດຖະກິດທຶນນິຍົມ ສິນຄ້າຜະລິດຂຶ້ນມາເພື່ອຂາຍ. ເພາະສະນັ້ນ ຈຳເປັນຕ້ອງບໍ່ພຽງແຕ່ຜະລິດສິນຄ້າຂຶ້ນເທົ່ານັ້ນແຕ່ຍັງຈະຂາຍມັນອີກ. ນາຍທຶນອຸດສາຫະກຳຂາຍສິນຄ້າຂອງຕົນໃຫ້ພວກການຄ້າຊຶ່ງເປັນຜູ້ສືບຕໍ່ຈຳຫນ່າຍສິນຄ້າໄປຍັງຜູ້ຊົມໃຊ້.

ຫນ້າທີ່ຂອງນາຍທຶນການຄ້າ ແມ່ນເຮັດໃຫ້ທຶນການຄ້າຫັນປ່ຽນໄປເປັນທຶນເງິນສົດ. ຖ້າສົມມຸດວ່າ ບໍ່ມີນາຍທຶນການຄ້າ ເມື່ອນັ້ນນາຍທຶນອຸດສາຫະກຳກໍຈະຕ້ອງມີທຶນສ່ວນເກີນຈຳນວນຫນຶ່ງອີກ ສຳລັບຊື້ອຸປະກອນຕ່າງໆ ເພື່ອ ປະກອບໃຫ້ແກ່ສະຖານທີ່ການຄ້າ ແລະ ວັດຖຸເຄື່ອງຂອງອື່ນໆ. ແຕ່ວ່າ ນາຍທຶນ

ຊຸດສ້າຫະກຳມອບໝາຍພາລະກິດດັ່ງກ່າວໃຫ້ແກ່ພວກພໍ່ຄ້າ ເພາະວ່າພວກ ພໍ່ ຄ້າຮູ້ໄດ້ເຖິງຄວາມຕ້ອງການຂອງທ້ອງຕະຫລາດ ແລະ ສາມາດທຳການ ສະ ສ້າງສິນຄ້າໄດ້ໄວ. ເວົ້າລວມແລວ ທີມການຄ້າ ແມ່ນທີມສ່ວນເພີ່ມ ທີ່ແຍກ ອອກມາຈາກທີມຊຸດສ້າຫະກຳ ແລະ ກໍຂັດກັບທີມຊຸດສ້າຫະກຳດັ່ງກ່າວ ໃນຖາ ນະເປັນທີມຂອງພວກນາຍທີມການຄ້າ ທີ່ໄດ້ຮັບພາກສ່ວນໜຶ່ງຂອງກຳໄລ.ກຳ ໄລທີ່ພວກການຄ້າໄດ້ຮັບມານັ້ນ ເອີ້ນວ່າກຳໄລການຄ້າ.

ບໍ່ເກີດຂອງກຳໄລການຄ້າ <u>ກຳໄລການຄ້າ</u> ແມ່ນພາກສ່ວນໜຶ່ງ ຂອງ ລຸນຄ້າສ່ວນເກີນທີ່ພວກຊຸດສ້າຫະກຳ ໄດ ປ່ອຍປະໃຫ້ແກ່ພວກການຄ້າ ຊຶ່ງເປັນຜູ້ຈຳໜ່າຍສິນຄ້າຂອງຕົນອອກ. ພວກ ນາຍທີມຊຸດສ້າຫະກຳຂາຍສິນຄ້າ ໃຫ້ພວກການຄ້າດ້ວຍລາຄາທີ່ຕ່ຳກວ່າຕົ້ນທຶນ ການຜະລິດ. ພວກການຄ້າເອງຈຳໜ່າຍສິນຄ້າອອກຕາມຕົ້ນທຶນການຜະລິດ. ໂດຍໄດ້ກອບໂກຍເອົາຜົນຈາກຄວາມແຕກຕ່າງລະຫວ່າງການຈຳໜ່າຍສິນຄ້າ ດ້ວຍລາຄາຕ່ຳກວ່າຕົ້ນທຶນນັ້ນ ພວກນາຍທີມການຄ້າຈະໄດ້ຮັບກຳໄລຂະໜາດ ຜ່ານກາງ ໃນບໍລິມາດຽ້ອກັນກັບພວກຊຸດສ້າຫະກຳ. ຖ້າວ່າກຳໄລຂອງ - ນາຍທີມການຄ້າຫາກຕ່ຳກວ່າກຳໄລຂະໜາດຜ່ານກາງແລວ ເມື່ອນັ້ນ ວຽກ ງານການຄ້າຈະກາຍເປັນທຸລະກິດທີ່ບໍ່ເປັນຜົນດີແກ່ຕົນ ແລະ ເຂົ້າກໍຈະ ນຳ ເອົາທີມນັ້ນໄປສູ່ຊຸດສ້າຫະກຳ. ພວກນາຍທີມຊຸດສ້າຫະກຳ ແລະ ພວກ ນາຍ ທີມການຄ້າ ໄດ້ຮັບກຳໄລຂະໜາດຜ່ານກາງ ນັ້ນບໍ່ໄດ້ໝາຍຄວາມວ່າ ພວກ ເຂົ້າເຈົ້າຈະໄດ້ຮັບບໍລິມາດກຳໄລເທົ່າທຽມກັນ. ເປັນສິ່ງທີ່ແນ່ນອນວ່າ ພວກ ນາຍທີມຊຸດສ້າຫະກຳໄດ້ທຸ່ມເທທີມຂອງຕົນເຂົ້າໃນການຜະລິດຫລາຍກວ່າ ທີ່ ພວກນາຍທີມການຄ້າໄດ້ທຸ່ມເທເຂົ້າ ໃນການຈຳໜ່າຍສິນຄ້າ. ເພາະສະນັ້ນ ພວກຊຸດສ້າຫະກຳຈຶ່ງຕ້ອງໄດ້ບໍລິມາດກຳໄລຫລາຍກວ່າ. ໃນເມື່ອພວກ ເຂົ້າ ເຈົ້າໄດ້ທຸ່ມເທທີມໃນບໍລິມາດເທົ່າທຽມກັນ ເມື່ອນັ້ນພວກເຂົ້າທັງສອງກໍຈະ ມີ ກຳໄລເທົ່າທຽມກັນ.

ໃນເມື່ອກາຍເປັນຮູບການກຳໄລການຄ້າແລ້ວ ລຸນຄ້າສ່ວນເກີນກໍ່ຍັງ ຈະ ຖືກປິດບັງໄປໃນຕົວ. ທີມຂອງນັກການຄ້າບໍ່ໄດ້ເຂົ້າປະກອບຢູ່ໃນການ ຜະລິດ ເລີຍ ສະນັ້ນຈຶ່ງປະກົດຄ້າຍກັບວ່າກຳໄລເກີດຂຶ້ນຈາກການຄ້າເອງ.

ການໃຊ້ຈ່າຍເພື່ອການຫມູນວຽນ ໃນໄລຍະການຈຳໜ່າຍສິນຄ້າ ມີຄວາມຕ້ອງການການໃຊ້ຈ່າຍ ຈຳນວນໃດໜຶ່ງ. ການໃຊ້ຈ່າຍດັ່ງກ່າວນີ້ ເອີ້ນວ່າ <u>ການໃຊ້ຈ່າຍເພື່ອການຫມູນວຽນ.</u>

ການໃຊ້ຈ່າຍທຶນນິຍົມ ເພື່ອການຫມູນວຽນ ມີສອງແບບທີ່ແຕກຕ່າງກັນຄື: ການໃຊ້ຈ່າຍຕົວຈິງ ແລະ ການໃຊ້ຈ່າຍເພີ່ມເຕີມ. <u>ການໃຊ້ຈ່າຍຕົວຈິງເພື່ອການຫມູນວຽນ</u> ພົວພັນເຖິງຂະບວນການຊື້-ຂາຍສິນຄ້າ. ພົວພັນກັບການ ໃຊ້ຈ່າຍຕົວຈິງເພື່ອການຫມູນວຽນນີ້ ຍັງມີການໃຊ້ຈ່າຍອັນຈຳເປັນແກ່ການ ຫັນປ່ຽນສິນຄ້າໄປເປັນເງິນ ແລະ ເງິນ ໄປເປັນສິນຄ້າ. ນອກຈາກນີ້ຍັງມີການໃຊ້ຈ່າຍຈຳນວນຫລວງຫລາຍ ເພື່ອຊຳລະຄ່າແຮງງານຂອງພະນັກງານການຄ້າ, ຫລໍ່ລ່ຽງຄ້ຳຈູນສຳນັກງານການຄ້າ, ການໂຄສະນາ ແລະການໃຊ້ຈ່າຍອື່ນໆທີ່ພົວພັນເຖິງການຊື້ງຂັ້ນ ແລະ ອື່ນໆອີກ. ການໃຊ້ຈ່າຍ ຕົວຈິງເພື່ອການຫມູນວຽນ ບໍ່ໄດ້ເພີ່ມມູນຄ່າໃດໆ ແກ່ສິນຄ້າເລີຍ ແລະ ພວກ - ນາຍທຶນ ຈະທົດແທນການໃຊ້ຈ່າຍດັ່ງກ່າວນີ້ ດ້ວຍອາໄສພາກສ່ວນໜຶ່ງ ຂອງມູນຄ່າສ່ວນເກີນ ທີ່ໄດ້ຮັບຈາກພວກນາຍທຶນຊຸດສຳຫະກຳ. ການໃຊ້ຈ່າຍ ຕົວຈິງປະກອບເປັນສ່ວນຫລວງຫລາຍ ໃນການໃຊ້ຈ່າຍ ເພື່ອການຫມູນວຽນຂອງການຄ້າທຶນນິຍົມ.

<u>ການໃຊ້ຈ່າຍເພີ່ມເຕີມເພື່ອການຫມູນວຽນພົວພັນເຖິງ ການສືບຕໍ່ ຂະບວນການຜະລິດຢູ່ໃນຂົງເຂດການຫມູນວຽນ.</u> ການໃຊ້ຈ່າຍດັ່ງກ່າວພົວພັນ-ເຖິງການໃຊ້ຈ່າຍອັນຈຳເປັນສຳລັບສັງຄົມ ໃນການປົກປັກຮັກສາ, ການດັດແປງສິນຄ້າ, ຈັດສົ່ງ, ໝຸນຫໍ່ສິນຄ້າ ໂດຍບໍ່ຂັ້ນກັບຈຸດພິເສດໃດໆຂອງເສດຖະກິດທຶນນິຍົມ. ແຕ່ລະຜົນຜະລິດຈະຖືກຊົມໃຊ້ໄດ້ກໍ່ຕໍ່ເມື່ອມັນຕົກຮອດມືຜູ້ຊົມໃຊ້. ແຮງງານເພື່ອການດັດແປງສິນຄ້າ, ຈັດສົ່ງ, ໝຸນຫໍ່ສິນຄ້າ ຈະເພີ່ມມູນຄ່າອັນໃຫມ່ເຂົ້າໃນມູນຄ່າສິນຄ້າ. ເພາະສະນັ້ນ ການໃຊ້ຈ່າຍເພື່ອການຫມູນວຽນນີ້ ຈຶ່ງບໍ່ມີຄວາມແຕກຕ່າງຫຍັງໝົດ ຈາກການໃຊ້ຈ່າຍໃນການຜະລິດ.

ຢູ່ໃນລະບອບທຶນນິຍົມ ການໃຊ້ຈ່າຍເພື່ອການຫມູນວຽນເພີ່ມສູງຂຶ້ນ ຢ່າງລຽນຕໍ່ ໂດຍສະເພາະຢ່າງຍິ່ງແມ່ນການໃຊ້ຈ່າຍຕົວຈິງ ທີ່ພົວພັນ ເຖິງການໂຄສະນາ. ຢູ່ໃນປະເທດທຶນນິຍົມຕ່າງໆ ການໃຊ້ຈ່າຍເພື່ອການຫມູນວຽນປະ

ກ່ອນມີປະມານຫນຶ່ງສ່ວນສາມຂອງຈຳນວນເງິນ ການຫມູນວຽນສິນຄ້າ ຂາຍ ຍ່ອຍ ແລະ ສ່ວນພາລະອັນຫນັກຫນ່ວງນັ້ນ ແມ່ນຊາວຜູ້ອອກແຮງງານເປັນ ຜູ້ ແບກຫາບ.

ຮູບການການຄ້າທຶນນິຍົມ. ການຄ້າຕ່າງປະເທດ

ຢູ່ໃນເສດຖະກິດທຶນນິຍົມສະໄຫມປະຈຸບັນນີ້ ມີ ສອງຮູບການຕົ້ນຕໍຂອງການຄ້າພາຍໃນຄື : <u>ແບບຂາຍຍົກແລະຂາຍຍ່ອຍ.</u> ການຄ້າຂາຍ ຍົກແມ່ນການຄ້າລະຫວ່າງພວກນາຍທຶນດ້ວຍກັນ (ພວກຊຸດສາຫະກຳແລະພວກ ການຄ້າ). ການຄ້າຂາຍຍ່ອຍແມ່ນການຂາຍສິນຄ້າໃຫແກ່ປະຊາຊົນ.

ຢູ່ໃນການຄ້າຂາຍຍົກນັ້ນ ອັນທີ່ເອີ້ນວ່າ ຕະຫລາດສິນຄ້າຂາຍຍົກກໍມີ ຄວາມຫມາຍ ສຳຄັນຫລາຍ. <u>ຕະຫລາດສິນຄ້າ</u> ຂາຍຍົກແມ່ນຕະຫລາດພົ້ນເດ ປະເພດຫນຶ່ງ ຊຶ່ງເປັນສະຖານທີ່ການຄ້າຕາມຕົວຢ່າງ ແລະ ເປັນສະຖານ ທີ່ ເຕົ້າໂຮມການສະເຫນີ ແລະ ການສະຫນອງສິນຄ້າ ໃນຂອບເຂດທົ່ວປະເທດ ກໍຄືທົ່ວຂົງເຂດໂລກທຶນນິຍົມກໍມັກເກີດມີຂຶ້ນເຊັ່ນດຽວກັນ. ນອກຈາກການ ຄ້າ ພາຍໃນ ຍັງມີການຄ້າຕ່າງປະເທດ.

<u>ການຄ້າຕ່າງປະເທດ</u> ແມ່ນຫມາຍເຖິງການຄ້າລະຫວ່າງປະເທດຊຶ່ງລວມ ມີການຄ້າຂາອອກ (ການເອົາສິນຄ້າອອກນອກປະເທດ) ແລະ ການ ຄ້າ ຂາເຂົ້າ (ການເອົາສິນຄ້າເຂົ້າມາພາຍໃນປະເທດ). ການສົມທຽບ ກັນ (ຕາມລາຄາເງິນ) ລະຫວ່າງການຄ້າຂາອອກ ແລະ ການຄ້າຂາເຂົ້າ ປະ ກອບເປັນ <u>ການດຸນດຽງການຄ້າ.</u> ການດຸນດຽງການຄ້າອາດຈະເປັນລັກສະ-ນະກຳມັນຕະພາບ ຫລືຂາດກຳມັນຕະພາບ. ຖ້າການເອົາສິນຄ້າອອກຈາກປະ ເທດຫາກສູງກວ່າການເອົາສິນຄ້າເຂົ້າມາພາຍໃນປະເທດ ເມື່ອນັ້ນ ການດຸນ ດຽງການຄ້າຈະເປັນກຳມັນຕະພາບ. ຖ້າການເອົາສິນຄ້າເຂົ້າມາພາຍໃນປະ ເທດຫາກສູງກວ່າການເອົາສິນຄ້າອອກ ເມື່ອນັ້ນການດຸນດຽງການຄ້າຈະເປັນ ການຂາດກຳມັນຕະພາບ.

ການຂາຍສິນຄ້າຢູ່ຕາມທ້ອງຕະຫລາດພາຍນອກ ໄດ້ສ້າງເງື່ອນໄຂ ສະ ດວກໃຫແກ່ພວກນາຍທຶນໃນການເສີມຂະຫຍາຍການຜະລິດໃຫ້ກວ້າງ ຂວ້າງ ອອກ ແລະ ເພີ່ມທະວີກຳໄລຂອງຕົນໃຫ້ສູງຂຶ້ນຕື່ມອີກ. ໂດຍສະເພາະ ຢ່າງ

ຍ້ງ ການຄ້າກັບບັນດາປະເທດທີ່ມີເສດຖະກິດຫລ້າຫລັງ ເປັນຜົນດີໃຫ້ແກ່ພວກນາຍທຶນປະເທດອຸດສາຫະກຳຂະຫຍາຍຕົວ. ອັນນີ້ຍອນວ່າ ຜະລິດຕະພັນ ສຳເລັດຮູບອຸດສາຫະກຳທີ່ສົ່ງໄປບັນດາປະເທດທີ່ຫລ້າຫລັງນັ້ນ ຈະຖືກຂາຍ ດ້ວຍລາຄາສູງສຸດ ສ່ວນວັດຖຸດິບຢູ່ໃນປະເທດເຫລົ່ານີ້ ຈະຊື້ດ້ວຍລາຄາ ຕ່ຳສຸດ. ການຄ້າຕ່າງປະເທດ ເປັນຫນຶ່ງໃນເຄື່ອງມືທຶນນິຍົມ ທີ່ຜູກມັດກົດຫນ່ວງບັນດາປະເທດດ້ອຍພັດທະນາ.

๔. ທຶນກູ້ຢືມ. ບໍລິສັດຫຸ້ນສ່ວນ

ທຶນກູ້ຢືມແລະດອກເບ້ຍ ຢູ່ໃນໄລຍະຮອບຫມູນວຽນທຶນນັ້ນ ບໍ່ມີ ພຽງແຕ່ທຶນການຄ້າເທົ່ານັ້ນ ແຕ່ຍັງມີທັງທຶນເງິນທີ່ນຳໃຊ້ ຮູບການທຶນກູ້ຢືມອີກ. ທຶນເສລີຈະເອົາມາຈາກໃສ? ຕົວຢ່າງພວກອຸດສາຫະກຳຂາຍສິນຄ້າສຳເລັດຮູບ ໃນແຕ່ລະເດືອນ ແລະ ຊື້ວັດຖຸດິບ ຫນຶ່ງເທື່ອຕໍ່ເຄິ່ງປີ ເມື່ອນັ້ນໃນໄລຍະຫ້າເດືອນເຂົາຈະມີເງິນເສລີ (ເງິນທີ່ບໍ່ ທັນນຳໃຊ້ເທື່ອ) ຢູ່ໃນກຳມື. ຖ້າວ່ານາຍທຶນຫາກສະສົມເງິນເພື່ອທົດແທນພາກສ່ວນຂອງທຶນຕົ້ນຕໍທີ່ໃຊ້ຈ່າຍໄປແລ້ວນັ້ນ (ຫລືເອີ້ນວ່າທຶນຫລຸ່ຍຫຽນ) ເມື່ອນັ້ນນາຍທຶນກໍຈະມີກ້ອນເງິນເສລີຈຳນວນຫນຶ່ງ ແຕ່ກໍເປັນພຽງລັກສະນະຊົ່ວຄາວ. ໃນອີກຫລາຍປີຕໍ່ຫນ້າ ເງິນຈຳນວນດັ່ງກ່າວຈຶ່ງຈະຖືກໃຊ້ ຈ່າຍຊື້ອຸປະກອນອັນໃຫມ່ອີກ.

ອີກກໍລະນີຫນຶ່ງ ນາຍທຶນອາດຈະເກີດມີຄວາມຕ້ອງການເງິນ, ຕົວຢ່າງ-ໃນກໍລະນີທີ່ເຂົາບໍ່ທ່ວງທັນໃນການຈຳຫນ່າຍສິນຄ້າສຳເລັດຮູບຂອງຕົນແຕ່ເຂົາພັດຈຳເປັນຕ້ອງການຢາກຊື້ວັດຖຸດິບ.

ສະຫລຸບໄດ້ວ່າ ໃນເວລາໃດກໍຕາມ ນາຍທຶນຜູ້ຫນຶ່ງຈະຕ້ອງມີສ່ວນ ເສດຊົ່ວຄາວຂອງທຶນ ແລະ ນາຍທຶນຜູ້ອື່ນຈະຕ້ອງສະເຫນີຄວາມຕ້ອງການ ຕໍ່ສ່ວນເສດດັ່ງກ່າວນັ້ນ. ນາຍທຶນຜູ້ທີ່ມີເງິນເສລີນັ້ນ ຈະເອົາເງິນຈຳນວນ ດັ່ງກ່າວໃຫ້ນາຍທຶນຜູ້ອື່ນກູ້ຢືມເພື່ອນຳໃຊ້ຊົ່ວຄາວ. <u>ທຶນກູ້ຢືມ</u> <u>ແມ່ນທຶນເງິນທີ່ມອບໃຫ້ຜູ້ໃດຜູ້ຫນຶ່ງເປັນການກູ້ຢືມພາຍໃນໄລຍະກຳນົດໃດຫນຶ່ງ</u> <u>ໂດຍຫັກເອົາຄ່າກູ້ຢືມຊຶ່ງເອີ້ນວ່າ</u> <u>ດອກເບ້ຍ</u>.

ດອກເບ້ຍ ແມ່ນສ່ວນຫນຶ່ງຂອງກຳໄລ ຊຶ່ງນາຍທຶນອຸດສາຫະກຳແລະນາຍທຶນການຄ້າໄດ້ສົ່ງຄືນໃຫ້ເຈົ້າຂອງເງິນ ໃນການໃຫ້ການກູ້ຢືມເງິນດັ່ງກ່າວ . ນາຍທຶນອຸດສາຫະກຳຫລືນາຍທຶນການຄ້າຈະນຳໃຊ້ເງິນທີ່ໄດ້ຮັບມານັ້ນເພື່ອລົງທຶນໃສ່ການຜະລິດຫລືການຄ້າ. ຈຸດພິເສດຂອງທຶນກູ້ຢືມມີຢູ່ວ່າ ມັນຈະບໍ່ຖືກນຳໃຊ້ໂດຍນາຍທຶນຜູ້ເປັນເຈົ້າຂອງ ທຶນດັ່ງກ່າວ. ໂດຍອາໄສການນຳໃຊ້ເງິນກູ້ຢືມເຂົ້າໃນການຜະລິດ ພວກອຸດສາຫະກຳໄດ້ຈ້າງກຳມະກອນແລະຈະໄດ້ ຮັບຄຸນຄ່າສ່ວນເກີນ. ສ່ວນຫນຶ່ງຂອງຄຸນຄ່າສ່ວນເກີນນີ້ເຂົ້າຈະຊຳລະໃຫ້ນາຍທຶນເຈົ້າຂອງເງິນກູ້ຢືມໃນຮູບດອກເບ້ຍ. ສະນັ້ນດອກເບ້ຍເງິນກູ້ຢືມແມ່ນຫນຶ່ງໃນຮູບການຄຸນຄ່າສ່ວນເກີນ.

ຕົວຢ່າງ, ນາຍທຶນອຸດສາຫະກຳໄດ້ຮັບເງິນກູ້ຢືມ ๑๐๐ ພັນໂດລາ. ໂດຍມີມາດຕະຖານກຳໄລຂະຫນາດຜ້ານກາງ ๘๐% ບໍລິມາດກຳໄລຕໍ່ທຶນດັ່ງກ່າວ-ຈະມີ ๘๐ ພັນໂດລາ. ນາຍທຶນອຸດສາຫະກຳຈະຈ່າຍດອກເບ້ຍໃຫ້ນາຍ ທຶນເຈົ້າຂອງເງິນກູ້ຢືມໂດຍຫັກເອົາຈຳນວນໃດຫນຶ່ງ ຈາກກຳໄລດັ່ງກ່າວນັ້ນ . ມາດຕະຖານດອກເບ້ຍ ແມ່ນການຫານຈຳນວນດອກເບ້ຍໃຫ້ທຶນກູ້ຢືມ. ຖ້າວ່າລະດັບດອກເບ້ຍເງິນກູ້ຢືມຫລືມາດຕະຖານດອກເບ້ຍປະກອບມີ ມ, ເມື່ອນັ້ນຕໍ່ເງິນກູ້ຢືມ ๑๐๐ ພັນໂດລາຈະຕ້ອງຊຳລະ ມ ພັນໂດລາຂອງກຳໄລຈາກ ๘๐ ພັນໂດລາ. ສ່ວນພາກສ່ວນທີ່ຍັງເຫລືອຂອງກຳໄລຄື ๑ກ ພັນໂດລານັ້ນຈະຕົກເປັນຂອງນາຍທຶນອຸດສາຫະກຳ. ພາກສ່ວນກຳໄລດັ່ງກ່າວນີ້ເອີ້ນວ່າ ກຳໄລການເຫມົາທຶນ.

ບໍລິມາດຂອງດອກເບ້ຍ ແລະ ຂອງກຳໄລການເຫມົາທຶນຊຶ່ງເປັນພາກ - ສ່ວນຂອງກຳໄລຜ້ານກາງ ທີ່ແຍກອອກເປັນດອກເບ້ຍ ແລະ ລາຍຮັບ ຈ້າງເຫມົາແມ່ນຂຶ້ນກັບລະດັບການສະເຫນີ ແລະ ການສະຫນອງ ຂອງທຶນກູ້ຢືມ. ຄວາມຕ້ອງການໃນທຶນ ສູງຂຶ້ນເທົ່າໃດ ມາດຕະຖານດອກເບ້ຍກໍຈະສູງຂຶ້ນເທົ່ານັ້ນ. ແຕ່ກົງກັນຂ້າມ ຄວາມຕ້ອງການໃນທຶນ ຕຳລົງເທົ່າໃດ ມາດຕະຖານດອກເບ້ຍກໍຍິ່ງຈະຕຳລົງເທົ່ານັ້ນ. ຍ້ອນວ່າ ດອກເບ້ຍແມ່ນເປັນສ່ວນຫນຶ່ງຂອງກຳໄລຂະຫນາດຜ້ານກາງເທົ່ານັ້ນ, ມາດຕະຖານດອກເບ້ຍ ຈຶ່ງບໍ່ສາມາດສູງກວ່າມາດຕະຖານກຳໄລຂະຫນາດຜ້ານກາງ.

ຈາກການຂະຫຍາຍຕົວຂອງລະບອບທຶນນິຍົມ ມາດຕະຖານດອກເບ້ຍ ກໍມີທ່າອຽງໄປສູ່ການຕົກຕຳ. ສິ່ງດັ່ງກ່າວເກີດຂຶ້ນຍ້ອນວ່າ, ຂໍ້ຫນຶ່ງ, ມາດຕະ-

ຖາມກຳໄລຂະໜາດຜ່ານກາງມີທ່າອຽງໄປສູ່ການຕົກຕ່ຳ ແລະ ຂໍ້ສອງ,ຈາກ ການຂະຫຍາຍຕົວຂອງລະບອບທຶນນິຍົມ ບໍລິມາດລວມຂອງທຶນກູ້ຢືມເພີ່ມທະວີ-ສູງຂຶ້ນຢ່າງແຮງ. ການສະໜອງທຶນສູງກວ່າຄວາມຕ້ອງການ. ສາຍເຫດເຫລົ່ານີ້ໄດ້ສ້າງເງື່ອນໄຂໃນການຕົກຕ່ຳຂອງລະດັບດອກເບ້ຍເງິນກູ້.

ເງິນສິນເຊື່ອທຶນນິຍົມ. ທະນາຄານ ແລະ ກຳໄລທະນາຄານ

ທຶນເງິນກູ້ຢືມຈະເຄື່ອນໄຫວຢູ່ ໃນຂົງເຂດສິນເຊື່ອ. ສິນເຊື່ອທຶນນິ-ຍົມປະກອບມີ ๘ ປະເພດດ້ວຍກັນ ຄື: ສິນເຊື່ອການຄ້າ ແລະ ສິນເຊື່ອທະນາຄານ.

<u>ສິນເຊື່ອການຄ້າ</u> ຈະຖືກນຳໃຊ້ໃນກໍລະນີທີ່ພວກນາຍທຶນອຸດສາຫະກຳແລະ ພວກນາຍທຶນການຄ້າໄດ້ຂາຍສິນຄ້າແກ່ກັນ ແລະ ກັນເປັນການຕິດໜີ້ໄວ້ໂດຍ ອອກໜັ້ງສືກູ້ຢືມ ໃນພັນທະຕໍ່ການຊຳລະມູນຄ່າທີ່ເປັນກ້ອນເງິນໃດໜຶ່ງ ຕາມ ກຳນົດເວລາທີ່ຕົກລົງກັນ.

<u>ສິນເຊື່ອທະນາຄານ</u> ແມ່ນສິນເຊື່ອທີ່ສະໜອງໃຫ້ແກ່ ພວກອຸດສາຫະກຳ ແລະ ພວກການຄ້າໂດຍພວກນາຍທຶນເງິນ (ພວກນາຍທະນາຄານ). ສິນ ເຊື່ອທະນາຄານມາຈາກທຶນເງິນເສລີ່ຍ ທີ່ເຕົ້າໂຮມໄວ້ຢູ່ພາຍໃນທະນາ ຄານ.

ຮູບການສິນເຊື່ອທຶນນິຍົມ



ຢູ່ໃນລະບອບທຶນນິຍົມ ທະນາຄານ ແມ່ນບໍລິສັດທຶນນິຍົມແຫ່ງໜຶ່ງ ຊຶ່ງ ເຄື່ອນໄຫວເປັນສື່ກາງລະຫວ່າງເຈົ້າຂອງສິນເຊື່ອ ແລະ ຜູ້ກູ້ຢືມ. ການເຄື່ອນ ໄຫວຂອງທະນາຄານແມ່ນຢູ່ບອນພື້ນ ທະນາຄານຕ້ຳໂຮມທຶນເງິນເສລີ ທີ່ບໍ ທັນນຳໃຊ້ ແລະ ມອບໝາຍໃຫ້ແກ່ນາຍທຶນບໍລິຫານລວມທັງລັດທຶນນິຍົມນຳ . ນອກຈາກນີ້ ນາຍທະນາຄານຍັງໄດ້ລົງທຶນໂດຍກົງໃສ່ວິສາຫະກິດອຸດສາຫະກຳ ແລະ ການຄ້າ. ເພາະສະນັ້ນ ໃນເວລາດຽວກັນ ເຂົາຈຶ່ງກາຍເປັນທັງນາຍ ທຶນບໍລິຫານໄປພ້ອມໆກັນ.

ຈຸດເລີ່ງຂອງການເຄື່ອນໄຫວທຸລະກິດທະນາຄານ ກໍຄືບໍລິສັດທຶນນິຍົມຕ່າງ ຕ່າງແມ່ນແນໃສ່ເພື່ອໃຫ້ໄດ້ຜົນກຳໄລ. ບໍ່ເກີດຂອງກຳໄລທະນາຄານ ແມ່ນ ຄຸນຄ່າສ່ວນເກີນທີ່ໄດ້ສ້າງຂຶ້ນໃນການຜະລິດ. ກຳໄລທະນາຄານ ແມ່ນ ຈຳ ນວນເງິນທຶນສ່ວນຕ່າງກັນ ລະຫວ່າງດອກເບ້ຍທີ່ທະນາຄານໄດ້ຮັບຈາກການກູ ຢືມ ແລະ ດອກເບ້ຍທີ່ທະນາຄານໄດ້ຊຳລະໃນການຝາກເງິນ. ການຝາກ ເງິນ ແມ່ນເງິນເສລີຊົ່ວຄາວທີ່ຝາກໄວ້ໃນທະນາຄານໂດຍພວກນາຍທຶນ,ພວກ ການຄ້າ, ເຈົ້າທີ່ດິນ ແລະ ຊັ້ນຄົນອື່ນໆ. ໃນເມື່ອທະນາຄານໄດ້ຈ່າຍ ດອກ ເບ້ຍຄ່າຝາກເງິນໃນລະດັບຕ່ຳກວ່າດອກເບ້ຍທີ່ທະນາຄານໄດ້ຮັບຈາກ ການ ໃຫ້ເງິນກູ້ຢືມເມື່ອນັ້ນທະນາຄານຈະໄດ້ຮັບກຳໄລ. ສະນັ້ນ ທະນາຄານຈຶ່ງໄດ້ ຈຳນວນເງິນທຶນສ່ວນຕ່າງກັນ. ທະນາຄານໄດ້ນຳເອົາສ່ວນເງິນດັ່ງກ່າວ ທົດ ແທນການໃຊ້ຈ່າຍທີ່ພົວພັນເຖິງການປະຕິບັດທຸລະກິດທະນາຄານ. ສ່ວນ ຈຳ ນວນເງິນທີ່ເຫລືອນັ້ນໄດ້ກາຍເປັນກຳໄລຂອງທະນາຄານເອງ. ການ ຂຸດ ເສັ້ງແບບທຶນນິຍົມໄດ້ເຮັດໃຫ້ກຳໄລຕົກໄປສູ່ລະດັບມາດຕະຖານຂະໜາດຜ່ານ ກາງຕໍ່ເງິນທຶນສະເພາະຂອງທະນາຄານ. ພາກສ່ວນໃຫຍ່ຂອງທຶນທະນາຄານ ແມ່ນທຶນທີ່ໄດ້ຮັບມາຈາກການຝາກເງິນ.

ນອກຈາກເປັນສື່ກາງຢູ່ໃນການສິນເຊື່ອແລ້ວ ທະນາຄານຍັງໄດ້ປະຕິ ບັດ ການຄິດໄລ່ບັນຊີລະຫວ່າງພວກນາຍທຶນ ແລະ ຮັບຜິດຊອບປະຕິບັດການເບີກ - ຈ່າຍເງິນຢ່າງກວ້າງຂວາງອີກຕື່ມ. ສະຫລຸບໄດ້ວ່າ ທະນາຄານໄດ້ເຮັດໜ້າ ທີ່ເປັນຜູ້ເບີກຈ່າຍສຳລັບພວກນາຍທຶນທັງຫລາຍ.

ຢູ່ໃນລະບອບທຶນນິຍົມ ທະນາຄານເປັນກົນໄກອັນໜຶ່ງໃນການແຈກ ຈ່າຍ ຊັບສົມບັດຜ່ານການເງິນລະຫວ່າງຂະແໜງການເສດຖະກິດຕ່າງໆ. ແຕ່ວ່າ

ການແຈກຈ່າຍຊັບສົມບັດດັ່ງກ່າວ ເຮັດຂຶ້ນບໍ່ແມ່ນເພື່ອຜົນປະໂຫຍດຂອງສັງຄົມເລີຍ ແຕ່ເພື່ອຜົນປະໂຫຍດຂອງພວກນາຍທຶນທັງນັ້ນ. ໂດຍຜູກມັດຢ່າງແຫນ້ນຫນາຂະແຫນງການເສດຖະກິດຕ່າງໆນັ້ນ ສົນເຊື່ອທຶນນິຍົມ ໄດ້ຊຸກຍູ້ການ ຫັນແຮງງານໃຫ້ເປັນຂອງສ່ວນລວມ. ແຕ່ວ່າການຫັນແຮງງານເປັນຂອງ ສ່ວນລວມນັ້ນ ແມ່ນເກີດຂຶ້ນບົນພື້ນຖານກຳມະສິດສ່ວນຕົວ ກ່ຽວກັບພາຫະນະ ການຜະລິດ. ດ້ວຍເຫດນີ້ ການຂະຫຍາຍເງິນສົນເຊື່ອຈໍ່ງຍໍ່ງເຮັດ ໃຫ້ຂໍ້ຂັດ ແຍ່ງຕ່າງໆຂອງແບບວິທີການຜະລິດແບບທຶນນິຍົມຮຸນແຮງຂຶ້ນ.

ບໍລິສັດຫຸ້ນສ່ວນ ໃນສະໄຫມເລີ່ມຕົ້ນລະບອບທຶນນິຍົມ ໂຮງຈັກ ໂຮງງານໄດ້ຕົກຢູ່ພາຍໃຕ້ກຳມະສິດຂອງແຕ່ລະຄົນ.ແຕ່ວ່າພາຍຫລັງມີການສ້າງສາຂະຫນາດໃຫຍ່ຂຶ້ນເຊັ່ນ ເສັ້ນທາງລົດໄຟ, ປະຕູ ນຳ້ສຳລັບເຮືອຂົນສົ່ງ, ໂຮງງານໂລຫະ, ຍານພາຫະນະ ແລະ ອື່ນໆ ບໍລິມາດທຶນສ່ວນຕົວກໍຂາດເຂີນບໍ່ພຽງພໍ. ສະນັ້ນນັບແຕ່ທ້າຍສະຕະວັດທີ ๑ຈ ເປັນຕົ້ນມາ ບໍລິສັດຫຸ້ນສ່ວນກໍໄດ້ຮັບການສ້າງຕັ້ງຂຶ້ນ ແລະ ໄດ້ຮັບການຂະຫຍາຍ ຕົວຢ່າງກວາງຂວາງຢູ່ໃນອຸດສາຫະກຳ, ການສ້າງເສັ້ນທາງລົດໄຟ ແລະ ທຸລະກິດທະນາຄານ. <u>ບໍລິສັດຫຸ້ນສ່ວນ</u> ແມ່ນຮູບການວິສາຫະກິດແບບຫນຶ່ງຊຶ່ງຕົ້ນທຶນຈະໄດ້ມາຈາກເງິນປະກອບສ່ວນຂອງຜູ້ເຂົ້າຮ່ວມທີ່ເປັນເຈົ້າຂອງຕໍ່ ຈຳນວນເງິນຫຸ້ນສ່ວນ ສ່ວນໃດສ່ວນຫນຶ່ງທີ່ເຂົ້າໄດ້ລົງທຶນໄປແລ້ວນັ້ນ. <u>ຫຸ້ນສ່ວນ-</u>ແມ່ນທະນາບັດທີ່ຊົງຄຸນຄ່າ ຊຶ່ງເປັນໃບຢັ້ງຢືນວ່າ ຜູ້ເປັນເຈົ້າຂອງທະນາບັດ-ດັ່ງກ່າວໄດ້ລົງທຶນສ່ວນໃດຫນຶ່ງເຂົ້າໃສ່ວິສາຫະກິດ. ຫຸ້ນສ່ວນໄດ້ໃຫ້ສິດ ແກ່ຜູ້ເປັນເຈົ້າຂອງໃນການຮັບສ່ວນຫນຶ່ງຂອງລາຍໄດ້ບໍລິສັດ, ຊຶ່ງລາຍໄດ້ດັ່ງກ່າວເອີ້ນວ່າ <u>ພູດແບ່ງປັນຫຸ້ນສ່ວນ</u>. ຫຸ້ນສ່ວນສາມາດຂາຍ ແລະ ຊື້ກັນໄດ້ໃນ ຕະຫລາດການຄ້າທະນາບັດຕາມລາຄາໃດຫນຶ່ງ ຊຶ່ງເອີ້ນວ່າ <u>ອັດຕາແລກປ່ຽນພູດຫຸ້ນສ່ວນ.</u> <u>ຕະຫລາດການຄ້າ</u>ທະນາບັດ ແມ່ນຕະຫລາດຊື້ຂາຍ ປະເພດຫນຶ່ງຂອງທະນາບັດທີ່ຊົງຄຸນຄ່າ ແລະ ກ່ອນອື່ນຫມົດ ແມ່ນຫຸ້ນສ່ວນ. ຢູ່ໃນ ຕະຫລາດດັ່ງກ່າວນີ້ ຫຸ້ນສ່ວນຈະຖືກຂາຍ ແລະ ຊື້ກັນ ແລະ ກຳນົດບັນທຶກ ອັດ-ຕາແລກປ່ຽນກັນ.

ອັດຕາແລກປ່ຽນຫລືລາຄາຂອງຫຸ້ນສ່ວນຂຶ້ນກັບສອງປັດໄຈຄື: ๑) ຂຶ້ນກັບ

ລະດັບດອກເບ້ຍທີ່ທະນາຄານຈ່າຍໃຫ້ລາຝາກເງິນ ແລະ ๔) ຂຶ້ນກັບລາຍຮັບປະຈຳປີຈາກຫຸ້ນສ່ວນ (ພູດແບ່ງປັນຫຸ້ນສ່ວນ). ຖ້າວ່າຫຸ້ນສ່ວນ ๑๐๐ ໂດລາ ຈະມີລາຍຮັບ ๑๐ ໂດລາຕໍ່ແຕ່ລະປີ ເມື່ອນັ້ນຫຸ້ນສ່ວນດັ່ງກ່າວຈະຖືກຂາຍເທົ່າກັບຈຳນວນເງິນທີ່ສາມາດນຳເອົາດອກເບ້ຍມາໃຫ້ໄດ້ໃນ ๑๐ ໂດລາແຕ່ລະປີ ໃນກໍລະນີທີ່ມີເງິນຈຳນວນດັ່ງກ່າວຝາກໄວ້ໃນທະນາຄານ. ຂໍສົມມຸດວ່າທະນາຄານຈ່າຍດອກເບ້ຍຝາກເງິນປະຈຳປີ ๕%, ໃນກໍລະນີນີ້ ຫຸ້ນສ່ວນ ຈະຖືກຂາຍໃນລາຄາ ๘๐๐ ໂດລາ ເພາະວ່າພາຍຫລັງນຳເອົາເງິນຈຳນວນດັ່ງກ່າວນີ້ໄປຝາກທະນາຄານ ຜູ້ເປັນເຈົ້າຂອງຈະໄດ້ຮັບເງິນເທົ່າກັບ ๑๐ ໂດລາຕໍ່ປີໃນຮູບດອກເບ້ຍ.

ເພື່ອ ນຳພາ ແລະ ຈັດຕັ້ງປະຕິບັດທຸລະກິດຂອງບໍລິສັດຫຸ້ນສ່ວນ ໃນກອງປະຊຸມຄົບຄະນະ ຜູ້ຖືຫຸ້ນສ່ວນໄດ້ມີການລົງຄະແນນສຽງເລືອກຕັ້ງກົວຈັກ ບໍລິຫານ ແລະ ບຸກຄົນຮັບຜິດຊອບ. ຢູ່ໃນກອງປະຊຸມນັ້ນ ຈຳນວນສຽງ ຈະຖືກຕັດສິນດ້ວຍຈຳນວນຫຸ້ນສ່ວນ. ແຕ່ວ່າຈຳນວນຫຸ້ນສ່ວນ ສ່ວນໃຫຍ່ ແມ່ນ ຕົກເປັນຂອງພວກນາຍທຶນໃຫຍ່ຈຳນວນບໍ່ຫລາຍ. ເພາະສະນັ້ນ ພວກເຂົາ ເຈົ້າຈຶ່ງໄດ້ກາຍເປັນເຈົ້າຂອງບໍລິສັດຫຸ້ນສ່ວນຢ່າງຂາດຕົວ. ພາກປະຕິບັດ ຕົວຈິງໄດ້ຊີ້ໃຫ້ເຫັນວ່າ ເຖິງຈະມີຫຸ້ນສ່ວນຫນ້ອຍກວ່າເຄິ່ງຫນຶ່ງຂອງຫຸ້ນສ່ວນທັງຫມົດກໍຕາມ ແຕ່ກໍຍັງສາມາດໄດ້ເປັນເຈົ້າຂອງບໍລິສັດຫຸ້ນສ່ວນໄດ້ຢ່າງສົມບູນ. ຈຳນວນຫຸ້ນສ່ວນ ທີ່ຕົກຢູ່ໃນກຳມືຂອງບຸກຄົນ ຫລືກຸ່ມຄົນໃດຫນຶ່ງທີ່ພົວພັນ ຊຶ່ງກັນແລະກັນ ແລະ ສ້າງເງື່ອນໄຂໄດ້ເປັນເຈົ້າຂອງຢູ່ໃນບໍລິສັດຫຸ້ນສ່ວນນັ້ນ ເອີ້ນວ່າພູດໃຫຍ່ຂອງຫຸ້ນສ່ວນ.

ທຶນທີ່ຢູ່ໃນຮູບການທະນາຄັດທີ່ຊົງຄຸນຄ່າ (ເງິນຫຸ້ນສ່ວນ, ພັນທະບັດ) ແລະ ທີ່ໄດ້ນຳລາຍຮັບໃຫ້ແກ່ຜູ້ເປັນເຈົ້າຂອງນັ້ນເອີ້ນວ່າ ທຶນປະດິດສ້າງ ກໍ່ເພາະວ່າ ທະນາຄັດທີ່ຊົງຄຸນຄ່າເອງ ບໍ່ມີຄຸນຄ່າແຕ່ຢ່າງໃດ. ມັນພຽງ ແຕ່ສອງແສງເຖິງການເຄື່ອນໄຫວທຶນແບບທາງອອມເທົ່ານັ້ນ.

ການເຕີບໃຫຍ່ຂອງບໍລິສັດຫຸ້ນສ່ວນນັບມື້ນັບຮັດໃຫ້ພວກນາຍທຶນ ໄດ້ກາຍເປັນຜູ້ຮັບດອກເບ້ຍ ແລະ ພູດແບ່ງປັນຫຸ້ນສ່ວນ ແລະ ໃນເວລາດຽວກັນການບໍລິຫານ. ດ້ວຍເຫດນີ້ຈຶ່ງເຮັດໃຫ້ລັກສະນະເກາະຫ່ອຍແຫ່ງກຳມະສິດທຶນນິຍົມ.

ຫຸ້ນສ່ວນຂາຍໃຫ້ປະຊາຊົນທົ່ວໄປ.ສິ່ງດັ່ງກ່າວໄດ້ເປັນຜົນດີແກ່ພວກ ນາຍ

ທຶນ: ຄົນຊື້ຫຸ້ນສ່ວນຫລາຍຂໍ້ນເທົ່າໃດ ກໍຍິ່ງເຮັດໃຫ້ເງິນທຶນຕົກໄປຢູ່ໃນ ກຳມືຂອງພວກເຈົ້າຂອງບໍລິສັດຫຸ້ນສ່ວນຫລາຍຂໍ້ນເທົ່ານັ້ນ. ການທີ່ຫຸ້ນສ່ວນໄດ້ ຕົກໄປຢູ່ນຳຊາວຜູ້ອອກແຮງງານນັ້ນ ໄດ້ເປັນເງື່ອນໄຂອ້າງອີງຂອງພວກນັກທິດ-ສະດີທີ່ໄດ້ສ້າງທິດສະດີວ່າດ້ວຍ "ການຫັນເປັນປະຊາທິປະໄຕຂອງທຶນ". ທິດສະດີຫລອກລວງດັ່ງກ່າວ ໄດ້ຢັ້ງຢືນວ່າ ຈາກການຂະຫຍາຍຮູບການແບບບໍລິ ສັດຫຸ້ນສ່ວນນີ້ ທາດແທ້ຂອງລະບອບທຶນນິຍົມ ກໍໄດ້ມີອັນປ່ຽນແປງ, ເພາະ ວ່າ ຊາວຜູ້ອອກແຮງງານແຕ່ລະຄົນ ເມື່ອຖືຫຸ້ນສ່ວນແລ້ວ ກໍຈະກາຍເປັນເຈົ້າຂອງ ຜູ້ຫນຶ່ງຂອງບໍລິສັດຫຸ້ນສ່ວນ ແລະ ກໍຈະສາມາດເຂົ້າຮ່ວມໃນການບໍລິຫານ ບໍລິ ສັດຫຸ້ນສ່ວນນຳອີກ. ຕົວຈິງແລ້ວ ບັນດາບໍລິສັດຫຸ້ນສ່ວນໄດ້ຄວບຄຸມໂດຍ ພວກ ນາຍທຶນກຸ່ມຫນຶ່ງ ຊຶ່ງເປັນເຈົ້າຂອງກອງພູດໃຫຍ່ຂອງຫຸ້ນສ່ວນ. ພວກນາຍທຶນ ໃຫຍ່ໄດ້ຮັບຜົນປະໂຫຍດທັງຫມົດຈາກທຶນຫຸ້ນສ່ວນ. ຊາວຜູ້ອອກແຮງງານ ຊຶ່ງ ເປັນເຈົ້າຂອງພູດນ້ອຍສຸດຂອງຫຸ້ນສ່ວນນັ້ນ ຈະບໍ່ມີບົດບາດຫຍັງຫມົດ ຢູ່ໃນ - ການບໍລິຫານ ບໍລິສັດຫຸ້ນສ່ວນນັ້ນເລີຍ.

ພວກເຮົາໄດ້ເຫັນແລ້ວວ່າ ຄຸນຄ່າສ່ວນເກີນໄດ້ຫັນປ່ຽນເປັນກຳໄລຄືແນວ ໃດ ແລະ ພວກນັກອຸດສາຫະກຳ, ພວກນັກການຄຸ, ນາຍທະນາຄານໄດ້ຮັບ ກຳໄລຄືແນວໃດນັ້ນ ພວກເຮົາກໍໄດ້ເຫັນມາແລ້ວເຊັ່ນດຽວກັນ. ແຕ່ວ່າ ຢູ່ໃນ ລະບອບທຶນນິຍົມ ຍັງມີຊົນຊັ້ນຂູດຮີດອີກຄື ພວກເຈົ້າທີ່ດິນໃຫຍ່. ພວກເຂົາ ກໍ ໄດ້ຮັບ ຄຸນຄ່າສ່ວນເກີນສ່ວນໃດຫນຶ່ງຄືກັນ. ພາກສ່ວນຄຸນຄ່າສ່ວນເກີນນີ້ ຖື ເປັນຮູບການດອກເບ້ຍທີ່ດິນທຶນນິຍົມ.

๕. ດອກເບ້ຍທີ່ດິນ ແລະ ການພົວພັນ ກະສິກຳຢູ່ໃນລະບອບ ທຶນນິຍົມ

ດອກເບ້ຍທີ່ດິນທຶນນິຍົມ

ດອກເບ້ຍທີ່ດິນໄດ້ມາຈາກໃສ ແລະ ແມ່ນ ໃຜປະກອບສ້າງມັນຂໍ້ນ ແລະມັນຕົກໄປ ຢູ່ ໃນກຳມືຂອງເຈົ້າທີ່ດິນໄດ້ຄືແນວໃດ ? ໃນການຕອບບັນຫາເຫລົ່ານີ້ ທິດສະດີ ມາກ-ເລນິນ ຫມາຍເຖິງກະສິກຳທຶນນິຍົມຊຶ່ງປະຕິບັດກັນດ້ວຍວິທີການກົດຂີ່ຂູດ ຮີດແຮງງານຮັບຈ້າງ. ນອກຈາກນີ້ຍັງຖືວ່າເຈົ້າທີ່ດິນແລະນາຍທຶນແມ່ນ ສອງ

ບຸກຄົນທີ່ແຕກຕ່າງກັນ.

ເຈົ້າທົດ ຈະບໍ່ດຳເນີນການກະສິກຳດ້ວຍຕົນເອງ. ເຂົາເອົາທົດ ໃຫ້ແກ່ນາຍທຶນ ທີ່ຢາກລົງທຶນເຂົ້າສູ່ການຜະລິດກະສິກຳເປັນຜູ້ເຊົ່າ. ນາຍທຶນ ໄດ້ຈ້າງກຳມະກອນກະສິກຳຊຶ່ງເປັນຜູ້ສ້າງຄຸນຄ່າສ່ວນເກີນໃນໄລຍະການຜະລິດ. ກ່ອນອື່ນໝົດ ຄຸນຄ່າສ່ວນເກີນນີ້ຈະຕົກໄປສູ່ກຳມືຂອງນາຍທຶນກະສິກຳ ແລະ-ຈະຖືກແບ່ງອອກເປັນສອງພວກ: ພວກທີໜຶ່ງ ແມ່ນກຳໄລຂອງເຂົາເທົ່າກັບ ກຳໄລຂະໜາດຜ່ານກາງຕໍ່ຕົນທຶນ; ອີກພວກໜຶ່ງ ແມ່ນສ່ວນເກີນຂອງກຳໄລ ຂະໜາດຜ່ານກາງ ຊຶ່ງຕົກໄປເປັນຂອງເຈົ້າທົດ. ຄຸນຄ່າສ່ວນເກີນກ່ອນນີ້ ຈະກາຍເປັນ<u>ດອກເບ້ຍທົດທຶນນິຍົມ.</u> ເປັນຫຍັງເຈົ້າທົດຈຶ່ງໄດ້ຮັບຄຸນຄ່າ ສ່ວນເກີນສ່ວນໜຶ່ງທີ່ສ້າງຂຶ້ນໂດຍຊາວກຳມະກອນທີ່ນາຍທຶນເປັນຜູ້ຈ້າງ ? ຍອມວ່າເຂົາເປັນເຈົ້າທົດນາກປາສະຈາກການອະນຸຍາດຂອງເຂົາແລ້ວ ໃຜ ກໍຕາມຈະບໍ່ມີສິດດຳເນີນທຸລະກິດຢູ່ດົນຕອນນີ້ໄດ້. ເພາະສະນັ້ນ ຈຶ່ງເວົ້າໄດ້ວ່າ ດອກເບ້ຍທົດ ແມ່ນຮູບການເສດຖະກິດຢ່າງໜຶ່ງໃນການຂາຍກຳມະສິດສ່ວນ ຕິວຕໍ່ທົດ. ຖ້າສົມມຸດວ່າ ນາຍທຶນຜູ້ເດີມນັ້ນນາກເປັນເຈົ້າທົດ ເມື່ອນັ້ນເຂົາ ກໍຄົງຈະໄດ້ຮັບໝົດຄຸນຄ່າສ່ວນເກີນທີ່ສ້າງຂຶ້ນໂດຍຊາວກຳມະກອນ ກະສິກຳ-ນັ້ນ.

ຢູ່ໃນລະບອບທຶນນິຍົມ ດອກເບ້ຍທົດແມ່ນແຕກຕ່າງຈາກດອກເບ້ຍທົດ-ສະໄໝສັກດິນາ. ຢູ່ໃນລະບອບສັກດິນາ ດອກເບ້ຍທົດ (ຕອບແທນ ດ້ວຍການເຮັດວຽກສິ່ງໜຶ່ງ, ວັດຖຸເຄື່ອງຂອງ, ເງິນ) ໄດ້ສະແດງໃຫ້ເຫັນເຖິງການ ພົວພັນ ແຫ່ງການຜະລິດແບບສັກດິນາ ລະຫວ່າງຊົນຊັ້ນຕົ້ນຕໍຄື ເຈົ້າທົດແລະ ທາດກະສິກອນ. ຢູ່ໃນລະບອບທຶນນິຍົມ ດອກເບ້ຍທົດ ສະແດງໃຫ້ເຫັນເຖິງ ການພົວພັນລະຫວ່າງສາມຊົນຊັ້ນດ້ວຍກັນນັ້ນຄື ເຈົ້າທົດ, ນາຍທຶນກະສິກຳ-ແລະ ກຳມະກອນຮັບຈ້າງກະສິກຳ. ຢູ່ໃນລະບອບສັກດິນາ ດອກເບ້ຍທົດໄດ້ ຕອບແທນດ້ວຍຜົນຜະລິດ ສ່ວນເກີນທັງໝົດ ທີ່ຜະລິດຂຶ້ນໂດຍຊາວໄຮ່ນາ. ຕົກ ມາໃນສະໄໝທຶນນິຍົມ ຄຸນຄ່າສ່ວນເກີນຖືກແບ່ງປັນກັນລະຫວ່າງຊົນຊັ້ນ ຊຸດ ຣິດ, ນາຍທຶນຜູ້ຈ້າງເຊົ່າ ແລະ ເຈົ້າທົດ.

ນອກນີ້ ກໍຍັງມີຄ່າຈ້າງສອງແບບ ທີ່ແຕກຕ່າງກັນ: <u>ດອກເບ້ຍ ປອກລອກ</u> ແລະ <u>ດອກເບ້ຍທົດເດັດຖາມ.</u> ວ.ອິ.ເລນິນ ໄດ້ເວົ້າວ່າ ການດຳລົງ ຄົງ

ຕົວຂອງດອກເບ້ຍທີ່ດິນ ສອງແບບນີ້ພົວພັນເຖິງ ການຜູກຂາດສອງປະເພດ : ການຜູກຂາດຕໍ່ທີ່ດິນໃນຖານະເປັນເປົ້າຫມາຍການຜະລິດ ຊຶ່ງການຜູກຂາດດັ່ງກ່າວກໍ່ໃຫ້ເກີດມີດອກເບ້ຍປອກລອກ ແລະ ການຜູກພັນກຳມະສິດສ່ວນຕົວ ຕໍ່ທີ່ດິນ ຊຶ່ງການຜູກຂາດດັ່ງກ່າວກໍ່ໃຫ້ເກີດມີດອກເບ້ຍທີ່ດິນເດັດຖານ.

ດອກເບ້ຍປອກລອກ ຢູ່ໃນອຸດສາຫະກຳຄຸນຄ່າສິນຄ້າ ແລະ ຕົ້ນ ທຶນ ການຜະລິດຖືກກຳນົດດ້ວຍເງື່ອນໄຂລະດັບ ປານກາງຂອງການຜະລິດ. ຢູ່ໃນການກະສິກຳ ຕົ້ນທຶນການຜະລິດ ຜະລິດຕະພັນ-ກະສິກຳຈະບໍ່ຖືກກຳນົດດ້ວຍເງື່ອນໄຂລະດັບປານກາງຂອງການຜະລິດເລີຍແຕ່ຫາກດ້ວຍເງື່ອນໄຂການຜະລິດຢູ່ໃນທີ່ດິນ ທີ່ບໍ່ອຸດົມສົມບູນ. ຍ້ອນວ່າເນື້ອທີ່ດິນ ມີອັນ ຈຳກັດ ແລະ ບໍ່ສາມາດຂະຫຍາຍມັນອອກຕື່ມໄດ້ ພວກເຊົ່າທີ່ດິນ ທີ່ມີ ຕອນດິນທີ່ອຸດົມສົມບູນດີ ແລະ ປານກາງຈຶ່ງໄດ້ຢູ່ໃນສະພາບອັນເຫມາະສົມ - ກວ່າພວກເຊົ່າທີ່ດິນ ທີ່ບໍ່ອຸດົມສົມບູນ. ການຜູກຂາດດັ່ງກ່າວຂອງພວກເຊົ່າ ຕໍ່ ຕອນດິນທີ່ແຕກຕ່າງກັນໃນຖານະເປັນເປົ້າຫມາຍຂອງການຜະລິດ ໄດ້ເຮັດໃຫ້ ມີສ່ວນແຕກຕ່າງກັນທາງດ້ານລາຍຮັບ. ດອກເບ້ຍປອກລອກ ແມ່ນສ່ວນ ເກີນ ຂອງຄຸນຄ່າສ່ວນເກີນບົນກຳໄລຂະຫນາດຜ້ານກາງ ທີ່ໄດ້ຮັບຢູ່ໃນກິດຈະການທີ່ ມີການຜະລິດ ບົນເງື່ອນໄຂອັນເຫມາະສົມກວ່າ. ແຕ່ວ່າທີ່ດິນ ເອງບໍ່ ໄດ້ ເປັນບໍ່ເກີດຂອງດອກເບ້ຍທີ່ດິນແຕ່ຢ່າງໃດ. ແຮງງານທີ່ນຳໃຊ້ໃສ່ຕໍ່ທີ່ດິນ ອັນ ອຸດົມສົມບູນດີນັ້ນ ແມ່ນເປັນແຮງງານທີ່ມີສະມັດຖະພາບສູງກວ່າ ແລະ ໃຫ້ກຳ ໄລເພີ່ມເຕີມ.

ມີສາມປັດໄຈດ້ວຍກັນ ທີ່ເປັນເງື່ອນໄຂໃນການໄດ້ຮັບດອກເບ້ຍປອກລອກ ຄື: ๑) ຄວາມແຕກຕ່າງກັນຢູ່ໃນຄວາມອຸດົມສົມບູນຂອງຕາດິນໃດຫນຶ່ງ; ๒) ຄວາມແຕກຕ່າງກັນຢູ່ໃນທີ່ຕັ້ງລະຫວ່າງຕາດິນກັບຕະຫລາດ; ສ) ຄວາມແຕກ ຕ່າງກັນຢູ່ໃນສະມັດຖະພາບເງິນທຶນທີ່ລົງທຶນເພີ່ມເຕີມເຂົ້າໃສ່ທີ່ດິນ.

ດອກເບ້ຍປອກລອກ ທີ່ພົວພັນເຖິງຄວາມແຕກຕ່າງກັນຢູ່ໃນຄວາມອຸດົມສົມ ບູນ ແລະ ທີ່ຕັ້ງຂອງຕາດິນຕ່າງໆນັ້ນ ທ່ານ ມາກ ໄດ້ເອີ້ນວ່າ ເປັນດອກ - ເບ້ຍປອກລອກ ๑. ພວກເຮົາພ້ອມກັນຄົ້ນຄວ້າເບິ່ງຕໍ່ໄປນີ້.

ພວກເຮົາຂໍຍົກຕົວຢ່າງດິນ ສ ຕອນທີ່ມີເນື້ອທີ່ຂະຫນາດດຽວກັນ ແຕ່ມີ

ຄວາມອຸດົມສົມບູນແຕກຕ່າງກັນ. ຢູ່ໃນແຕ່ລະຕອນນັ້ນ ຜູ້ເຊົ່າໄດ້ຈ້າງ ກຳມະກອນ, ຊຸ້ມັດພັນ, ເຄື່ອງມືອຸປະກອນຕ່າງໆ ແລະ ໝົດເງິນໄປ ໑໐໐ ໂດລາ. ແຕ່ຍອມວ່າຕາດິນມີອັນແຕກຕ່າງກັນທາງດ້ານຄວາມອຸດົມສົມບູນ ການເກັບກ່ຽວເຂົ້າເປືອກທີ່ໄດ້ມາກໍມີອັນແຕກຕ່າງເຊັ່ນດຽວກັນ: ຢູ່ໃນດິນຕອນ ໑-໔໐໐ ກິໂລ, ຕອນ ๘-๕໐໐ ກິໂລ ແລະ ຕອນ ๓-๒໐໐ ກິໂລ.

ສົມມຸດວ່າ ມາດຕະຖານກຳໄລຂະໜາດຜ່ານກາງເທົ່າກັບ ๘໐%. ຢູ່ໃນກໍລະນີ ຕົ້ນທຶນການຜະລິດເຂົ້າເປືອກທັງໝົດ (ການໃຊ້ຈ່າຍໃນການຜະລິດບວກກັບກຳໄລຂະໜາດຜ່ານກາງ) ຢູ່ໃນແຕ່ລະຕາດິນ ຈະເທົ່າກັບ ๑๘໐-ໂດລາ. ຕົ້ນທຶນການຜະລິດຕົວຈິງຂອງ ๑໐໐ ກິໂລເຂົ້າເປືອກມີເທົ່າໃດ? ຢູ່ໃນດິນຕອນ ๑ ເຂົ້າເປືອກ ๑໐໐ ກິໂລ ຈະຕີລາຄາເປັນ ๓໐ ໂດລາ(๑๘໐ : ๔), ຕອນ ๘-๘๔ (๑๘໐ : ๕), ຕອນ ๓-๘໐ (๑๘໐ : ๖). ແຕ່ວ່າຢູ່ທ່ວງຕະຫລາດ ລາຄາເຂົ້າເປືອກຈະຖືກກຳນົດຢູ່ໃນລະດັບລາຄາຂອງຕອນດິນທີ່ບໍ່ອຸດົມສົມບູນ, ໝາຍຄວາມວ່າ ໃນລາຄາ ๓໐ ໂດລາ ຕໍ່ ๑໐໐ກິໂລ. ຖ້າວ່າລາຄາຫາກຖືກກຳນົດຢູ່ໃນລະດັບ ๘๔ ໂດລາ (ຕອນດິນທີ່ອຸດົມປານກາງ) ເມື່ອນັ້ນນາຍທຶນກະສິກຳ ທີ່ດຳເນີນການກະສິກຳບົນຕອນດິນ ທີ່ບໍ່ອຸດົມສົມບູນນັ້ນ ກໍຄົງຈະໄດ້ຮັບພຽງແຕ່ ๒๖ ໂດລາຕໍ່ເທົ່ານັ້ນ (๔x๘๔ ໂດລາ) ເທົ່າກັນກັບວ່າ ເຂົາຈະບໍ່ໄດ້ຮັບຄືນແມ່ນແຕ່ ຄ່າລ້ຽງທຶນໄປແລ້ວ ໂດຍບໍ່ທັນໄດ້ເວົ້າເຖິງການຂາດກຳໄລທັງໝົດເລີຍ. ສິ່ງດັ່ງກ່າວນີ້ ກໍຈະເຮັດໃຫ້ພວກນາຍທຶນທີ່ດຳເນີນການກະສິກຳບົນຕອນດິນ ທີ່ບໍ່ອຸດົມສົມບູນນັ້ນ ປະລະຫຼະລະກິດການກະສິກຳ.

ໃນເວລາດຽວກັນ ພວກເຂົາກໍບໍ່ສາມາດຈະຍົກຍ້າຍໄປຫາຕອນດິນທີ່ອຸດົມສົມບູນຫລືອຸດົມປານກາງໄດ້ເລີຍ ເພາະວ່າຕອນດິນເຫລົ່ານັ້ນຖືກຄອບ ຄອງໂດຍພວກນາຍທຶນກະສິກຳຄົນອື່ນແລ້ວ. ການຢຸດຕິການຜະລິດຢູ່ໃນດິນທີ່ບໍ່ອຸດົມສົມບູນນັ້ນ ຈະໄດ້ສົ່ງຜົນສະທ້ອນເຖິງການເກັບຊື້ເຂົ້າເປືອກທັງໝົດ: ການເກັບກູ້ກໍຈະຕົກຕ່ຳລົງ. ຢູ່ໃນກໍລະນີນີ້ ລາຄາເຂົ້າເປືອກກໍຈະເລີ່ມສູງຂຶ້ນແລະໃນເມື່ອລາຄາໄດ້ຖີບຕົວສູງເຖິງລະດັບ ๓໐ ໂດລາຕໍ່ ๑໐໐ ກິໂລແລ້ວ ເມື່ອນັ້ນແນວຄິດຢາກດຳເນີນການກະສິກຳບົນຕອນດິນທີ່ບໍ່ອຸດົມສົມບູນກໍຈະ ປາກົດ
ເກີດຂຶ້ນອີກເທື່ອໜຶ່ງ.

ດັ່ງນັ້ນ ຜູ້ຊົ່າຕອນດິນທີ່ ๑ ຈະຂາຍຜົນເກັບກ່ຽວຂອງຕົນເປັນລາຄາ - ๑๘๐ ໂດລາ, ຜູ້ຊົ່າຕອນດິນທີ ๘-๑๕๐ ໂດລາ ແລະ ຜູ້ຊົ່າຕອນດິນທີ ມ - ๑๗๐ ໂດລາ. ສ່ວນເກີນຈາກຕົ້ນທຶນການຜະລິດທີ່ໄດ້ຮັບຢູ່ໃນຕອນດິນທີ ๘ ແມ່ນ ມ້ວ ໂດລາ ແລະ ຢູ່ໃນຕອນດິນທີ ມ-ຜ້ວ ໂດລາ ຈະປະກອບເປັນ - ດອກເບັ້ຍປອກລອກ ๑.

ພວກເຮົາຂໍສະເຫນີຕາຕະລາງດັ່ງລຸ່ມນີ້:

ຕອນດິນ	ຕົ້ນທຶນ (ເປັນໂດລາ)	ກຳໄລຂະຫນາດຜ່ານກາງ (ເປັນໂດລາ)	ຜົນເກັບກຽວ (ຄິດໄລ່ເປັນ ๑๐๐ ກິໂລ)	ຕົ້ນທຶນສະເພາະ ການຜະລິດ (ເປັນໂດລາ)		ຕົ້ນທຶນລວມ ການຜະລິດ (ເປັນໂດລາ)		ດອກເບັ້ຍ ປອກລອກ ī (ເປັນໂດລາ)
				ຕົ້ນທຶນສະເພາະ ຜົນຜະລິດລວມ ທັງຫມົດ	๑๐๐ ກິໂລ	๑๐๐ ກິໂລ	ຕົ້ນທຶນທັງຫມົດ ຂອງຜົນຜະລິດ ລວມ	
I	๑๐๐	๘๐	๔	๑๘๐	ມ້ວ	ມ້ວ	๑๘๐	-
II	๑๐๐	๘๐	๕	๑๘๐	๘๔	ມ້ວ	๑๕๐	ມ້ວ
III	๑๐๐	๘๐	ຜ	๑๘๐	๘๐	ມ້ວ	๑๗๐	ຜ້ວ

ສະຫລຸບໄດ້ວ່າ ດອກເບັ້ຍປອກລອກ ແມ່ນສ່ວນເກີນຂອງຄຸນຄ່າສ່ວນເກີນ ບົນກຳໄລຂະຫນາດຜ້ານກາງ ແລະ ສ່ວນເກີນດັ່ງກ່າວປະກອບສ້າງຂຶ້ນ ໂດຍ ແຮງງານຂອງຊາວກຳມະກອນຮັບຈ້າງກະສິກຳ. ແຮງງານຂອງຊາວ ກຳມະ ກອນຢູ່ໃນແຕ່ລະຕອນດິນ ທີ່ແຕກຕ່າງກັນນັ້ນ ມີສະມັດຖະພາບບໍ່ຄືກັນ ເພາະ ສະນັ້ນ ຄຸນຄ່າສ່ວນເກີນຈຶ່ງໄດ້ບໍ່ລົມາດບໍ່ເທົ່າທຽມກັນ.

ການເກີດມີດອກເບັ້ຍປອກລອກ ๑ ນີ້ໄດ້ພົວພັນກັບທັງທີ່ຕັ້ງຂອງຕອນ ດິນ ນຳອີກ ກໍຄືພົວພັນກ່ຽວກັບໄລຍະຫ່າງໄກຈາກທ້ອງຕະຫລາດ, ເສັ້ນທາງນຳຫຼື ເສັ້ນທາງລົດໄຟ. ກິດຈະການກະສິກຳທີ່ຕັ້ງຢູ່ໃກ້ຄຽງກັບສະຖານທີ່ການຄ້າ ກໍ ຈະປະຢັດແຮງງານ ແລະ ລວມທັງອຸປະກອນໃນການຂົນສົ່ງຜົນຜະລິດ ຫລາຍ ກວ່າກິດຈະການທີ່ຕັ້ງຢູ່ຫ່າງໄກຈາກສະຖານທີ່ດັ່ງກ່າວ. ໂດຍການຂາຍຜົນຜະ

ລິດຂອງຕົນຕາມລາຄາດຽວກັນກັບລາຄາທີ່ກົດຈະການຢູ່ຫ່າງໄກ ໄດ້ຂາຍ ຜົນ ຜະລິດນັ້ນໄດ້ເຮັດໃຫ້ມີລາຍຮັບສ່ວນເກີນຂອງຄຸນຄ່າສ່ວນເກີນ.

ດອກເບ້ຍປອກລອກ ໄດ້ເກີດຂຶ້ນທັ່ງຢູ່ໃນກໍລະນີທີ່ມີການລົງທຶນ ເພີ່ມເຕີມ ຕໍ່ທຶນນຳອີກ (ດ້ວຍວ່າໄສການນຳໃຊ້ຝຸ່ນວິທະຍາສາດ, ດຳເນີນວຽກ ງານ ການຂັບປ່ຽນ, ນຳໃຊ້ເຄື່ອງກົນຈັກທັນສະໄໝ ແລະ ອື່ນໆ). ກຳໄລສ່ວນ ເພີ່ມເຕີມ ທີ່ໄດ້ຮັບຈາກຜົນແຫ່ງການດຳເນີນການກະເສດສຸມ ຄືນວ່າ ດອກ ເບ້ຍປອກລອກ ຂ.

ນອກຈາກດອກເບ້ຍປອກລອກ ๑ ແລະ ຂ ແລ້ວ ເຈົ້າທຶນຍັງໄດ້ຮັບ - ດອກເບ້ຍທຶນດັດຖານນຳອີກ.

ດອກເບ້ຍທຶນດັດຖານ. ຢູ່ໃນລະບອບທຶນນິຍົມ ທຶນແມ່ນ ກຳມະ
ລາຄາທຶນ ສິດສ່ວນຕົວຂອງສ່ວນບຸກຄົນ. ຍ້ອນເຫດ
ນີ້ ເພື່ອຈະລົງທຶນເຂົ້າໃນການກະສິກຳ-
ຈຳຕ້ອງໄດ້ຮັບຄວາມເຫັນດີເຫັນພ້ອມຈາກເຈົ້າທຶນເສຍກ່ອນ. ການຜູກຂາດ ກຳມະສິດສ່ວນຕົວຕໍ່ທຶນນີ້ ແມ່ນເພື່ອສະກັດກັ້ນການຮົ່ວໄຫລຂອງທຶນຢ່າງເສລີ ຈາກການອຸດສາຫະກຳ ເຂົ້າສູ່ການກະສິກຳ. ດ້ວຍເຫດນີ້ຢູ່ໃນກະສິກຳ ຈຶ່ງມີ ໂຄງປະກອບຂອງທຶນຕ່ຳກວ່າຢູ່ໃນອຸດສາຫະກຳ. ໝາຍຄວາມວ່າຕົ້ນທຶນ ຂະ ໜາດດຽວກັນທີ່ນຳເຂົ້າໃຊ້ຢູ່ໃນກະສິກຳ ຈະໄດ້ຮັບຄຸນຄ່າສ່ວນເກີນ ຫລາຍ ກວ່າຢູ່ໃນອຸດສາຫະກຳ. ຖ້າວ່າ ກ້ອນທຶນ ຫາກມາຈາກອຸດສາຫະກຳ ນຳ ເຂົ້າສູ່ກະສິກຳ ເມື່ອນັ້ນ ສ່ວນເກີນຂອງຄຸນຄ່າສ່ວນເກີນທີ່ປະກອບມື້ນ ຢູ່ໃນ ກະສິກຳຈຶ່ງມີໂຄງປະກອບຂອງທຶນຕ່ຳຢູ່ແລ້ວນັ້ນ ກໍຄົງຈະໄດ້ຖືກແຍກອອກ ລະ ຫວ່າງອຸດສາຫະກຳ ແລະ ການກະສິກຳ. ແຕ່ວ່າກຳມະສິດສ່ວນຕົວຕໍ່ທຶນໄດ້ ສະກັດກັ້ນບໍ່ໃຫ້ມີການແບ່ງປັນໂຄງປະກອບຂອງທຶນຄືນໃໝ່ ລະຫວ່າງ ພວກ ນາຍທຶນດ້ວຍກັນ. ເພາະສະນັ້ນ ເຈົ້າທຶນ ຈຶ່ງຄອຍຄອງສ່ວນເກີນຈຶ່ງໄດ້ຮັບ ຈາກກ້ອນທຶນຂອງພວກນາຍທຶນໜຶ່ງໜາຍລົງທຶນເຂົ້າສູ່ກະສິກຳນັ້ນໄວ້.

ພວກນາຍທຶນບໍ່ສາມາດຈັດຕັ້ງ ດຳເນີນທຳການຜະລິດກະສິກຳໄດ້ຖ້າບໍ່ຊຳ ລະຄ່າເຊົ່າທຶນໃຫ້ແກ່ພວກເຈົ້າທຶນ. ໜ່ວຍເຊົ່າທີ່ເຈົ້າທຶນເກັບເອົ້ານ້ອຍ ສຸດທີ່ໃນການມີກຳມະສິດສ່ວນຕົວຕໍ່ທຶນນັ້ນ ເອີ້ນວ່າດອກເບ້ຍທຶນດັດຖານ.



ກົດຫມາຍຕ້ານກອມມູນິດ ແລະ ຕ້ານກຳມະກອນ, ການຫ້ານປາມ ພັກ ກອມມູນິດ, ການຂັບໄລ່ພວກນັກກອມມູນິດ ແລະ ພວກກຳມະກອນທີ່ກ້າວຫນ້າ ອື່ນໆ, ການເກັບກຳບັນຊີມືດ ຢູ່ຕາມໂຮງຈັກໂຮງງານຕ່າງໆ ການກວດກາ ຄວາມຊື່ຕົງຂອງພະລາກອນຮັບໃຊ້, ການບີບຮັດຂອງພວກຕຳຫລວດຕ້ານຫນັງ ສືພິມປະຊາທິປະໄຕ, ການປາບປາມການເດີນປະທ້ວງ ດ້ວຍອາໄສກຳລັງອາ ວຸດວິທີການທັງຫມົດເຫລົ່ານີ້ ພວກຈັກກະພັດໄດ້ນຳໃຊ້ເພື່ອປົກປັກຮັກສາ ການ ຄອບຄອງຂອງຕົນໄວ້.

ການກາຝາກ ແລະ ເປື່ອຍເຍື່ອຍ ຂອງລະບອບທຶນນິຍົມຜູກຂາດ ຍັ້ງ ຍືນໃຫ້ເຫັນວ່າ ທາງປະຫວັດສາດລະບອບທຶນນິຍົມ ໄດ້ທຳລາຍຕົນເອງ ແລະ ແນ່ນອນລະບອບທີ່ກ້າວຫນ້າຄືລະບອບສັງຄົມນິຍົມ ຕ້ອງເກີດຂຶ້ນມາແທນທີ່.

ละບອບจัภภะพัดนิยิมแม่น ละบอบทึมนิยิมดับอุบ

ວ.ອີ.ເลนิน ได้ชี้แจ้งว่า ละบอบจัภภะพัดนิยิม แม่นละบอบทึมนิ ยิมดับอุบ. ซมายดอามว่า ละบอบจัภภะพัดนิยิม มีลัภสะนะอุ่อดาอ และ ເธัดใซ้ภาบอัดแย่งยิ่งธุบ แธงธอบด้าน จิบเฤิงอั้นแตภซัภ อุ่งเปันภาบส้างปะฤิมปัดไจใซ้แภ่ภาบปะติอัดภำมาอุบ.

ข้อัดแย่งอันสำดับแม่น ข้อัดแย่งละซว่างแธงงานและทึม. ยู่ใบไลยะละบอบทึมนิยิมผูภอาดนี้ อิทิภาบอูดธิดแบบเภิ่าภำ ได้ธับภาบเพิ่มเติมโดยอิทิภาบอูดธิดแบบใซม่ เอิ้าติ่มอีภ. สิดผูภอาดอองพอภ นายทึมใซย่อะนุยาดใซ้เพิ่มละดับภาบภิดอี่อูดธิด อุบอุ้นภำมะภอบอั้น ย่างลฐบติดด้อยอิทิภาบนำใอ้ละบิบอัดตาด่าแธงงานแบบใซม่สุด, ใซ้เพิ่มละดับแธงงานสุมอั้น, ใซ้ปุ่นสะดิมอาวผู้ออภแธงงาน ที่เปันผู้อุ่ม ใอ้ด้อยภาบอางลาดาผูภอาดสูงต่ำอัดฤอุ่มใอ้ ใซ้เพิ่มภาบเสยส่อยอั้น, ใซ้ดำเนินมาดตะภาบปับใซม และ อื่นๆ. ยู่ใบละบอบจัภภะพัดนิยิมภาบเพิ่มซะอิภาบภิดอี่อูดธิด, ไพซว่างงานฤิบติออั้นสูง, ภาบปัภปำ ซางด้านภาบเมืองย่างธุบแธง สิ่งซังซมิดนี้ ยิ่งเธัดใซ้ภาบต่ำสู้อุ่นอุ้น ละซว่างอาวภำมาอุบ และ พอภนายทึมซะอิดูนอั้น. อิทิภาบต่ำสู้แบบเภิ่าอองอุ่นอุ้นภำมะภอบภำเซันว่าใอ้ภาบบ่ได้ย่างเตันส่อนแล้อ. ดฐงดูภับภาบต่ำสู้ซางด้านเสดถะภิด อาวภำมาอุบได้ภาวเอิ้าสู่เสั้นซางภาบปะติอัดซางด้านภาบเมืองย่างเดัดดฐอ.

ภาบอัดแย่งบ่มีพฐงแต่ละซว่างพอภนายทึม และ อาวภำมาอุบ - เซิ่านั้น แต่ภ็ยังมีละซว่างดะนาทิปะไตภาบเงิน และ อุ้นดินต่างๆซังซมิด อองสังดิมอีภ. ภาบเพิ่มซะอิภาบภิดอี่อูดธิด และ ภาบภิดซนองซางด้านเสดถะภิดอองพอภนายทึมผูภอาด บ่พฐงแต่เธัดใซ้อาวภำมาอุบ และ อาวไธ่นาพิบภับดอามพุภยาภลำบาภเซิ่านั้น แต่นับซัง พอภนายอ่างซัดถะภำ, นายทึมน้อย และ ปานุภาง, พะลาภอบ และปันยาอุ่นอีภ. สิ่งดั่งภ่าอได้ส้างเงื่อนไอใซ้แภ่ภาบเต็าโธมซุภภำลัง ปะอาทิปะไตย่างเปันเอภะพาบภัน เพื่อซำภาบต้านอิดทิภำลัง ผูภอาด

ພາຍໃຕ້ການນຳພາຂອງຊົນຊັ້ນກຳມະກອນ.

ສະນັ້ນ ລະບອບຈັກກະພັດນິຍົມ ຈຶ່ງນຳເອົາຊົນຊັ້ນກຳມະກອນໄປສູ່ ການ ເຮັດການປະຕິວັດສັງຄົມນິຍົມ.

ຢູ່ໃນໄລຍະການຂະຫຍາຍຕົວ ຂອງລະບອບຈັກກະພັດນິຍົມນັ້ນມີ<u>ການຂັດ</u>
<u>ແຍ່ງກັນລະຫວ່າງບັນດາປະເທດມະຫາອຳນາດຈັກກະພັດດ້ວຍກັນ</u> <u>ທີ່ທຳການຕໍ່</u>
<u>ສູ້ຍາດຊິງເອົາຂົງເຂດແຜ່ຂະຫຍາຍ</u>. ພວກນາຍທຶນແຕ່ລະກຸ່ມ ໄດ້ ມຸ້ງ ໜາຍບຽດຍົດ ແລະ ກຳເອົາຕະຫລາດການຄ້າ, ແຫລ່ງວັດຖຸດິບ, ຂົງເຂດ ການລົງທຶນ. ລັດໄດ້ໃຫ້ການສະໜັບສະໜູນແກ່ການຕໍ່ສູ້ທາງດ້ານເສດຖະກິດ ຂອງພວກນາຍທຶນ ເພື່ອຍາດຊິງເອົາຂົງເຂດແຜ່ຂະຫຍາຍຂອງພວກເຂົາເຈົ້າ. ສົງຄາມໄດ້ນຳໄປສູ່ການປະທະກັນທາງສາກົນ. ການຕໍ່ສູ້ຢ່າງດຸເດືອດ-ລະຫວ່າງບັນດາປະເທດຈັກກະພັດ ເພື່ອຍາດຊິງເອົາຂົງເຂດອິດທິພົນ ໄດ້ - ເຮັດໃຫ້ເກີດມີການປະທະກັນ ທາງທະຫານ ແລະ ກາຍເປັນການນາບຂູ່ລວມ ຕໍ່ສັນຕິພາບ.

ຢູ່ໃນສະໄໝຈັກກະພັດນິຍົມນັ້ໄດ້ມີ <u>ການຂັດແຍ່ງຢ່າງຮຸນແຮງລະຫວ່າງ-</u>
<u>ບັນດາປະເທດຫົວເມືອງຂຶ້ນ</u> <u>ແລະ</u> <u>ອະນານິຄົມຝ່າຍໜຶ່ງ</u> <u>ແລະ</u> <u>ອີກຝ່າຍໜຶ່ງ</u>
<u>ບັນດາປະເທດມະຫາອຳນາດຈັກກະພັດ.</u> ປະເທດມະຫາອຳນາດຈັກກະພັດ-ໄດ້ປຸນສະຄົມປະຊາກອນຂອງປະເທດກຳລັງພັດທະນາ ຢ່າງບໍ່ມີການປະນີປະ-ນອມເລີຍ. ການເພີ່ມທະວີການກົດຂີ່ຂົ່ມເຫັງຈັກກະພັດ ແລະ ລວມທັງ ການ ຂະຫຍາຍຕົວຂອງລະບອບທຶນນິຍົມ ຢູ່ຕາມບັນດາປະເທດອະດີດຫົວເມືອງ ຂຶ້ນ ແລະ ອະນານິຄົມ ໄດ້ນຳໄປສູ່ການເພີ່ມທະວີການຕໍ່ສູ້ເພື່ອປົດປ່ອຍ ຕົນເອງ ທາງດ້ານເສດຖະກິດຂອງປະຊາກອນພາຍໃນປະເທດເຫລົ່ານັ້.

ການກຳເນີດ ແລະ ຄວາມໝັ້ນຄົງຂອງລະບອບສັງຄົມນິຍົມ ໄດ້ກາຍ - ເປັນຍຸກສະໄໝແຫ່ງການປົດປ່ອຍປະຊາກອນ ທີ່ຖືກກົດຂີ່ຂົ່ມເຫັງທັງຫລາຍ . ການປະຕິວັດປົດປ່ອຍຊາດ ໄດ້ຍຸກທັບມາງພວກນັກລ່າຫົວເມືອງຂຶ້ນທັງໝົດ.ຢູ່ ຕາມບັນດາອະດີດເຂື່ອຈັກກະພົບຕ່າງໆ ໄດ້ມີຫລາຍລັດໃໝ່ຂຶ້ນມີ ປະຊາກອນ ຫລາຍກວ່າໜຶ່ງສ່ວນສາມຂອງໂລກໄດ້ຮັບເອກະລາດ. ການສືບຕໍ່ການ ຂັດ ແຍ່ງລະຫວ່າງບັນດາປະເທດມະຫາອຳນາດຈັກກະພັດ ແລະ ປະຊາກອນຂອງ ບັນດາປະເທດຫົວເມືອງຂຶ້ນຕ່າງໆ ໄດ້ເຮັດໃຫ້ລະບົບລ່າຫົວເມືອງຂຶ້ນຂອງລະ

ขอบจักภะพัดมิยมพัวุทะลายลิว.

ปัดจัยมถาข้อัดแยวอันสำคัม ที่เธัดใท้ละขอบจักภะพัดมิยม ได้ภายเป็นละขอบท้มนิยมดับอุบ. แต่อาภามติลาถาละขอบจักภะพัดมิยม อาเป็นละขอบท้มนิยมดับอุบนี้ บ่ได้หมายถาละขอบท้มนิยม จะดับอุบ ลิวย่างอัดตะโนมัด แต่ย่างใด. ละขอบจักภะพัดมิยม ภายเป็นละขอบท้มนิยมดับอุบ ก็เพาะอาภามมีข้อัดแยวจ้นเถิวขั้นแตกหักฮองละขอบท้มนิยมมั้น มันได้เปิดอุฮองทางใท้แก่ภามกำเมิดภามปะติวัดสังคมนิยมอันย่างหลีกเลยงบ่ได้.

ไฮยะมะฮองภามปะติวัดสังคมนิยมเบื้องต้น ยู่ที่ปะเทดลัดเอย - และ ต่จาภั้น ยู่ตามขันดาปะเทดเอ๊ลิบ, อาอุ๊ และ อาเมลิกา ลาติม นั้นเป็นภามยั้งยืมย่างจะแจ้ว ต่ภามติลาดาฮองเลนิน ภ่อภับละขอบจักภะพัดมิยม ในฐามะละขอบท้มนิยมดับอุบ.

ก็ดเทมภามฮะขยายติอที่บ่	ยู่ในแบบอิทิภามผะลิดท้มนิยมโธว
สะเหมิพาบทางด้าม	จักโธวงาม, ฮะแหมุงภามฮุดสา
เสดถะกิด และภามเมือง	หะกำ และ ปะเทดต่างๆ มิภาม
	ฮะขยายติอแบบบ่สะเหมิพาบกัม.

ถอามบ่สะเหมิพาบแต่งภามฮะขยายติอ แม่นผืมฮองภามอุวงเสิวุ กัม และ ลักสะมะเองกะเทดกะแจกกะจายแซ่งภามผะลิดท้มนิยม. ยู่ในสะไหมก่อมภามผุกขาดละขอบท้มนิยม ได้ฮะขยายติอย่างเป็นจิงหอะสะเหมิดสำใดสำหน้ง. ถอามหล้าหลังฮองปะเทดหน้งสืมหฐบใส่ กับปะเทดอื่น ก็เกิดมีขั้นในอุ่อไลยะเวลาอันยาวนาม. ติภมาธอด ละขอบจักภะพัดมิยม ลักสะมะถอามบ่สะเหมิพาบกันในภามฮะขยาย ติอฮองละขอบท้มนิยม ก็มีอันปฐมแปง. ยู่ในสะไหมจักภะพัดมิยมนี้ ภามฮะขยายติอฮองแต่ละปะเทดมีลักสะมะกะโดดอั้ม.

ภามปะติวัดอิทะยาสาด-เต้ภนิก ได้เปิดอุฮองทางแก่ขันดาปะเทดที่มำใฮ้หมากผืมภามปะติวัดนี้ ก้าวล้นภายดู่แฮงฮองตินได้ในอุ่อกำนิดเวลาอันสั้นๆ.

ການຊັ່ງຊາກຳລັງແຮງທີ່ໄດ້ມີການປ່ຽນແປງທາງດ້ານເສດຖະກິດ ແລະ ການທະຫານຂອງບັນດາປະເທດມະຫາອຳນາດຈັກກະພັດ ໄດ້ເຮັດໃຫ້ເກີດ ມີການປະທະກັນຂໍ້ນລະຫວ່າງພວກເຂົາເຈົ້າເອງ ແລະ ເກີດມີການຕໍ່ສູ້ເພື່ອ - ຍາດຊິງເອົາສ່ວນແບ່ງຂົງເຂດໂລກຕື່ມອີກ. ໂລກທຶນນິຍົມຖືກຕັດແຍກອອກ - ເປັນຫລາຍກຸ່ມ ທີ່ເປັນປໍລະປັກກັນ. ການເຮັດໃຫ້ການຂັດແຍ່ງຍິ່ງຮຸນແຮງຂໍ້ນ ຢູ່ໃນຄ້າຍຈັກກະພັດນິຍົມນັ້ນ ໄດ້ເຮັດໃຫ້ລະບອບຈັກກະພັດນິຍົມເອງອ່ອນເພຍ ລົງ. ບົນພື້ນຖານດັ່ງກ່າວບັ້ນລົບຕ້ານພວກຈັກກະພັດອາດຈະລະເບີດຂໍ້ນຢູ່ບ່ອນ ທີ່ ຕ່ອງໂສ້ຂອງລະບອບຈັກກະພັດນິຍົມອ່ອນທີ່ສຸດຄື ຢູ່ໃນປະເທດທີ່ມີເງື່ອນໄຂ ສະດວກສຳລັບໄຊຊະນະຂອງການປະຕິວັດ ທາງສັງຄົມ.

ຄວາມບໍ່ສະເຫມີພາບກັນ ທາງດ້ານການຂະຫຍາຍຕົວ ທາງເສດຖະກິດ ຂອງບັນດາປະເທດທຶນນິຍົມໃນສະໄຫມຈັກກະພັດນິຍົມນີ້ ໄດ້ເຮັດໃຫ້ເກີດມີທັງ ຄວາມບໍ່ສະເຫມີພາບກັນທາງດ້ານການເມືອງອີກ. ລະດັບຄວາມຂັດແຍ່ງ ຊົນ ຊັ້ນຢູ່ໃນແຕ່ລະປະເທດບໍ່ຄ້າຍຄືກັນ, ສ່ວນລະດັບການຕື່ນຕົວທາງການເມືອງ- ແລະ ແນວຄິດປະຕິວັດຂອງຊາວກຳມາຊີບໃນແຕ່ລະປະເທດກໍບໍ່ຄ້າຍຄືກັນເຊັ່ນ ດຽວກັນ, ປະສົບການ ຂອງຂະບວນຊາວໄຮ່ນາ ແລະ ຄວາມເປັນອັນຫນຶ່ງ ອັນດຽວກັນກໍມີອັນຈຳກັດ. ອັນນີ້ແມ່ນຫມາຍເຖິງຄວາມບໍ່ສະເຫມີພາບໃນການ ສ້າງປະຖົມເງື່ອນໄຂທາງດ້ານການເມືອງ ເພື່ອດຳເນີນການປະຕິວັດ ກຳມາ ຊີບຢູ່ໃນແຕ່ລະປະເທດ.

ໂດຍອີງໃສ່ກົດເກນການຂະຫຍາຍຕົວ ທີ່ບໍ່ສະເຫມີພາບທາງດ້ານເສດຖະ ກິດ ແລະ ການເມືອງຂອງບັນດາປະເທດທຶນນິຍົມຢູ່ໃນສະໄຫມຈັກກະພັດນິຍົມ ນີ້ ວ.ອີ.ເລນິນ ໄດ້ໃຫ້ຂໍ້ສະຫລຸບທີ່ມີຄວາມຫມາຍສຳຄັນອັນເປັນປະຫວັດການ ກ່ຽວກັບຄວາມອາດສາມາດໄດ້ຮັບໄຊຊະນະຂອງສັງຄົມນິຍົມເບື້ອງຕົ້ນ ຢູ່ພາຍ ໃນບັນດາປະເທດທຶນນິຍົມຈຳນວນຫນຶ່ງ ຫລືບາງທີກໍອາດຈະຢູ່ພາຍໃນປະເທດ ທຶນນິຍົມປະເທດດຽວເສຍກ່ອນ ແລະ ກ່ຽວກັບຄວາມບໍ່ອາດສາມາດຕົວຈິງ ທີ່ ຈະໄດ້ຮັບໄຊຊະນະຂອງສັງຄົມນິຍົມຢູ່ໃນຫມົດທຸກໆປະເທດ ພາຍໃນເວລາ - ດຽວກັນ, ສ່ວນປະເທດທີ່ດຳເນີນການປະຕິວັດນັ້ນ ບໍ່ຈຳເປັນທີ່ຈະຕ້ອງ ເປັນ ປະເທດທຶນນິຍົມ ທີ່ຂະຫຍາຍຕົວສູງເສຍກ່ອນ. ໄຊຊະນະຂອງການປະຕິວັດ- ສັງຄົມນິຍົມຢູ່ໃນປະເທດຫນຶ່ງ ອາດຈະກາຍເປັນຈຸດເລີ່ມຕົ້ນແຫ່ງການ ປະຕິ-

ວັດສັງຄົມນິຍົມໂລກ.

ຄວາມໝາຍອັນສຳຄັນຍິ່ງ ຂອງບົດສະຫລຸບຂອງ ເລນິນ ນັ້ນ'' ' '

๗. ທຶນການເວົ້ນ ແລະ ຄະນາທິປະໄຕການເວົ້ນແມ່ນຫຍັງ ?
๘. ຮູບການການສົ່ງທຶນອອກຕ່າງປະເທດ ແລະ ຜົນສະທ້ອນຂອງມັນ.
๙. ຈົ່ງໃຫ້ລາຍລະອຽດ ກ່ຽວກັບການຕັດແບ່ງໂລກ ທາງດ້ານເສດຖະກິດ ແລະ ຂົງເຂດໂລກຢູ່ໃນຍຸກສະໄຫມຈັກກະພັດນິຍົມ ແລະ ການຕໍ່ສູ້ຍາດຊິງເອົາສ່ວນແບ່ງຂົງເຂດໂລກ.
๑๐. ລະບົບລ່າຫົວເມືອງຂຶ້ນຂອງຈັກກະພັດນິຍົມ ມີລັກສະນະໃດ ແລະ ບົດບາດຂອງບັນດາປະເທດຫົວເມືອງຂຶ້ນ ເປັນລັກສະນະໃດຢູ່ໃນຍຸກສະໄຫມຈັກກະພັດນິຍົມ ?
๑๐. ກຳໄລຜູກຂາດແມ່ນຫຍັງ ແລະ ບໍ່ເກີດຂອງມັນມີຫຍັງແດ່ ?
๑๑. ທິດຕ່າງປະຫວັດສາດຂອງລະບອບຈັກກະພັດນິຍົມ ແມ່ນຫຍັງ ?
๑๘. ເນື້ອໃນຂອງກົດເກນການຂະຫຍາຍຕົວ ທີ່ບໍ່ສະເຫມີພາບກັນທາງ ດ້ານ ເສດຖະກິດ ແລະ ການເມືອງ ຂອງລະບອບທຶນນິຍົມ ໃນຍຸກສະໄຫມ ຈັກກະພັດນິຍົມເປັນລັກສະນະໃດ ? ທິດສະດີ ເລນິນ ກ່ຽວກັບຄວາມອາດ ສາມາດໄດ້ຮັບໄຊຊະນະຂອງສັງຄົມນິຍົມ ຢູ່ພາຍໃນປະເທດຫນຶ່ງ.

ພາກ ແປດ

ວິກິດການຮອບດ້ານຂອງລະບອບທຶນນິຍົມ

ວິກິດການຮອບດ້ານ ຂອງລະບອບທຶນນິຍົມ ໄດ້ກວມເອົາ ຍຸກສະໄຫມປະຫວັດສາດອັນຊ້ານານ. ການຂະຫຍາຍຕົວຂອງມັນ ໄດ້ອອກຈາກລະດັບ ຫນຶ່ງ ໄປສູ່ອີກລະດັບຫນຶ່ງ, ມີລັກສະນະ ບໍ່ສະຫມໍ່ສະເຫມີ, ກະໂດດຂັ້ນແລະເກີດ ຂຶ້ນໂດຍຜ່ານການສູ້ຢັນຊົນຊັ້ນ ແລະ ພະຍຸເສດຖະກິດ.

๑. ເນື້ອໃນ ແລະ ການຂະຫຍາຍຕົວວິກິດການ ຮອບດ້ານຂອງລະບອບທຶນນິຍົມໂລກ

ເນື້ອໃນແລະລະດັບວິກິດການ ຮອບດ້ານຂອງລະບອບ ທຶນນິຍົມ

"ຈິດໃຈເນື້ອໃນຕົ້ນຕໍຂອງຍຸກສະ - ໄຫມໃຫມ່ ແມ່ນການຂ້ານຜ່ານ ແຕ່ ລະບອບທຶນນິຍົມ ໄປສູ່ລະບອບ ສັງ ຄົມນິຍົມ, ຍຸກສະໄຫມແຫ່ງການຕໍ່ສູ້ຂອງສອງລະບົບທີ່ເປັນປໍລະປັກກັນ, ຍຸກສະ ໄຫມແຫ່ງການປະຕິວັດສັງຄົມນິຍົມ ແລະ ປົດປ່ອຍຊາດ, ຍຸກສະໄຫມ ແຫ່ງ ການພັງທະລາຍຂອງລະບອບຈັກກະພັດນິຍົມ, ແຫ່ງການລົບລ້າງລະບົບລ່າຫົວ ເມືອງຂຶ້ນ, ຍຸກສະໄຫມແຫ່ງການຂ້ານຜ່ານໄປສູ່ເສັ້ນທາງສັງຄົມນິຍົມຂອງປະ ຊາກອນຮຸ່ນໃຫມ່, ແຫ່ງໄຊຊະນະຂອງລັດທິສັງຄົມນິຍົມ ແລະ ລັດທິກອມມູນິດ ຢູ່ໃນຂອບເຂດທົ່ວໂລກ. ມາດຕານີ້ໄດ້ບົ່ງໄວ້ຢູ່ໃນໂຄງການຂອງພັກກອມມູນິດ

ແຫ່ງສະຫະພາບໂຊວຽດ ແລະ ສະແດງໃຫ້ເຫັນເຖິງເນື້ອໃນຂອງ <u>ວິກິດການຮອບດ້ານແຫ່ງລະບອບທຶນນິຍົມ.</u>

ການເລີ່ມຕົ້ນຂອງວິກິດການຮອບດ້ານແຫ່ງລະບອບທຶນນິຍົມ ເກີດຂຶ້ນຍ້ອນສົງຄາມໂລກຄັ້ງທີໜຶ່ງ ແລະ ມະຫາປະຕິວັດສັງຄົມນິຍົມເດືອນຕຸລາຢູ່ໃນ ປະເທດລັດເຊຍປີ ໑໙໑໗. ລະບອບທຶນນິຍົມ ໄດ້ຢຸດຕິການເປັນເຈົ້າລະບົບຄອບຄອງໂລກ. ຢູ່ໃນດິນແດນ ໑/ຝ ຂອງໂລກໄດ້ມີລັດໜຶ່ງທີ່ບໍ່ນອນຢູ່ບົນກຳມະ-ສິດສ່ວນຕົວເກີດຂຶ້ນ ແຕ່ນອນຢູ່ບົນກຳມະສິດສັງຄົມນິຍົມ ກຽວກັບພາຫະນະການຜະລິດຕົ້ນຕໍ. ໄຊຊະນະການປະຕິວັດກຳມາຊີບຢູ່ໃນລັດເຊຍ ໄດ້ຊີ້ ບອກວ່າ ຍຸກສະໄໝແຫ່ງການລົ້ມລະລາຍຂອງລະບອບທຶນນິຍົມ ແລະ ຍຸກສະໄໝແຫ່ງໄຊຊະນະຂອງລະບອບສັງຄົມນິຍົມນັ້ນ ໄດ້ເລີ່ມຂຶ້ນແລ້ວ. ສະໄໝ ສົງຄາມໂລກຄັ້ງທີໜຶ່ງໄດ້ຢັ້ງຢືນທິດສະດີຂອງ ເລນິນ ທີ່ວ່າ ຢູ່ໃນໄລຍະລະບອບຈັກກະພັດນິຍົມນີ້ ລະບອບສັງຄົມນິຍົມ ຈະໄດ້ຮັບໄຊຊະນະຢູ່ຕາມບັນດາ ປະເທດຕ່າງໆດ້ວຍກຳນົດເວລາຕ່າງກັນ ແລະ ໃນຊ່ວງເວລາອັນຍາວນານຫຼາຍຫລາຍປະເທດຈະຫລຸດພົ້ນອອກຈາກລະບົບທຶນນິຍົມໂລກ ຢ່າງຕໍ່ເນື່ອງກັນດ້ວຍການຮັດການປະຕິວັດ.

ຢູ່ໃນພາກໜຶ່ງທີ່ຜ່ານມາແລ້ວນັ້ນ ພວກເຮົາໄດ້ເວົ້າກັນແລ້ວ ກຽວກັບວິ-ກິດການການຜະລິດລົ້ນຕະຫລາດ. ວິກິດການເຫລົ່ານັ້ນ ແມ່ນຈຸດສຳຄັນທີ່ ບໍ່ສາມາດແຍກອອກໄດ້ຈາກແບບວິທີການຜະລິດທຶນນິຍົມ. ສ່ວນວິກິດການຮອບດ້ານຂອງລະບອບທຶນນິຍົມແຕກຕ່າງຈາກວິກິດການທີ່ກ່າວມານັ້ນ ຍ້ອນວ່ານັ້ນບໍ່ພຽງແຕ່ກວມລວມເອົາດ້ານເສດຖະກິດເທົ່ານັ້ນ ແຕ່ຍັງກວມລວມໝົດທຸກຂົງເຂດວິ-ວັດອື່ນໆຂອງບັນດາປະເທດທຶນນິຍົມ ທາງດ້ານການເມືອງ, ວັດທະນະທຳ , ແນວຄິດນັ້ນ ຄືວິກິດການຮອບດ້ານແຫ່ງລະບົບທຶນນິຍົມໂລກ ໂດຍສັງລວມ ຊຶ່ງມີຈຸດພິເສດຂອງມັນຢູ່ບ່ອນການຕໍ່ສູ້ລະຫວ່າງລະບອບທຶນນິຍົມ ທີ່ອ່ອນເພຍແລະລະບອບສັງຄົມນິຍົມທີ່ນັບມື້ນັບເຕີບໃຫຍ່ຂະຫຍາຍຕົວ ແລະ ເປັນສິ່ງຕັດສິນອະນາຄົດ. ການຂ້າມຜ່ານແຕ່ລະບອບທຶນນິຍົມ ໄປສູ່ລະບອບສັງຄົມນິຍົມ ແມ່ນເນື້ອໃນປະກອບຕົ້ນຕໍຂອງຍຸກສະໄໝ ແຫ່ງວິກິດການຮອບດ້ານ ຂອງລະບອບທຶນນິຍົມ.

ໃນປະຈຸບັນນີ້ ວິກິດການຮອບດ້ານແຫ່ງລະບອບທຶນນິຍົມ ໄດ້ຢູ່ໃນຂັ້ນ ທີ

ສາມ ແຫ່ງການຂະຫຍາຍຕົວຂອງມັນ. ຂັ້ນທີໜຶ່ງ ໄດ້ເລີ່ມຕົ້ນໃນໄລຍະ ສົງຄາມໂລກ ຄັ້ງທີໜຶ່ງ ແລະ ໄຊຊະນະຂອງມະຫາປະຕິວັດສັງຄົມນິຍົມເດືອນຕຸລາຢູ່ລັດເຊຍ. ຂັ້ນທີສອງ ຂອງວິກິດການຮອບດ້ານ ແຫ່ງລະບອບທຶນນິຍົມ-ໄດ້ເກີດຂຶ້ນໃນໄລຍະສົງຄາມໂລກຄັ້ງທີສອງ ແລະ ຂັ້ນດາການປະຕິວັດສັງຄົມນິຍົມ ທີ່ເກີດຢູ່ໃນຂັ້ນດາປະເທດເອີລົບ ແລະ ອາຊີ. ໃນທ້າຍຊຸມປີ ໑໙໕໐-ລະບອບທຶນນິຍົມໂລກ ໄດ້ກ້າວຂຶ້ນສູ່ຂັ້ນໃໝ່ ຂັ້ນທີສາມ ແຫ່ງວິກິດການຮອບດ້ານຂອງມັນ. ຈຸດພິເສດຂອງຂັ້ນໃໝ່ນີ້ ມີຢູ່ບ່ອນວ່າ ມັນບໍ່ໄດ້ເກີດຂຶ້ນ ຍ້ອນສາຍເຫດຈາກສົງຄາມໂລກ ແຕ່ໃນເງື່ອນໄຂການແຂ່ງຂັນອັນສັນຕິ ລະຫວ່າງສອງລະບົບແລະຍ້ອນວ່າການຊ້ຽງຊາກຳລັງໄດ້ຕົກເປັນຝ່າຍຂອງລະບອບສັງຄົມນິຍົມ.

ໄຊຊະນະຂອງການປະຕິວັດສັງຄົມນິຍົມ ຢູ່ປະເທດກຸຍບາ, ລາວ, ກຳປູເຈຍ, ອັຟການິດສະຖານ, ການດັດສ້າງດ້ານເສດຖະກິດ-ສັງຄົມຢູ່ບັນດາປະເທດກຳລັງພັດທະນາ ທີ່ບໍ່ເດີນໄປຕາມເສັ້ນທາງຂະຫຍາຍຕົວແບບທຶນນິຍົມໄດ ຢັ້ງຢືນເຖິງຄວາມອາດສາມາດ ໃນການຫລຸດພົ້ນອອກຈາກລະບົບທຶນນິຍົມໂລກ ຂອງຫລາຍປະເທດໃໝ່ໆ ໃນເງື່ອນໄຂແບບສັນຕິ.

ຈຸດສຳຄັນຕົ້ນຕໍຂອງວິກິດການຮອບດ້ານ ແຫ່ງລະບອບທຶນນິຍົມຄື: ການແບ່ງໂລກອອກເປັນສອງລະບົບສັງຄົມ ທີ່ເປັນປໍລະປັກກັນ ແລະ ການຫລຸດພົ້ນອອກຈາກລະບອບທຶນນິຍົມ ຂອງຫລາຍປະເທດໃໝ່ໆ; ສະພາບອອນເພຍຊຸດໂຊມຂອງລະບອບຈັກກະພັດນິຍົມ ໃນການແຂ່ງຂັນທາງດ້ານເສດຖະກິດກັບລະບອບສັງຄົມນິຍົມ; ວິກິດການ ແລະ ການພ່າຫະລາຍຂອງລະບົບລ່າເມືອງຂຶ້ນຂອງຈັກກະພັດນິຍົມ; ການຂັດແຍ່ງຢ່າງຮຸນແຮງຂອງລະບອບຈັກກະພັດ ນິຍົມໃນໄລຍະການຂະຫຍາຍຕົວ ຂອງລະບອບທຶນນິຍົມຜູກຂາດແຫ່ງລັດ ແລະ ການຫັນເສດຖະກິດໄປໃນທາງການທະຫານ, ການເພີ່ມທະວີຄວາມບໍ່ໝັ້ນຄົງພາຍໃນ ແລະ ເສດຖະກິດທຶນນິຍົມເປ່ຍເຍ່ຍຊ້ຳເຮື້ອໃຫ້ລະບອບທຶນນິຍົມ-ອາດສະມັດຖະພາບການນຳໃຊ້ກຳລັງການຜະລິດ ໄດ້ຢ່າງເຕັມສ່ວນ (ຈັງຫວະການຂະຫຍາຍຕົວຂອງການຜະລິດຕ່ຳ, ວິກິດການເສດຖະກິດເກີດຂຶ້ນ - ຢ່າງຮຸນແຮງ, ການໝຸນໃຊ້ສະມັດຖະພາບການຜະລິດບໍ່ເຕັມເມັດເຕັມໜ່ວຍ ການຫວ່າງງານຊ້ຳເຮື້ອ); ການຕໍ່ສູ້ອັນດຸເດືອດລະຫວ່າງແຮງງານ ແລະ

ເວີນທົ່ນ; ການຂັດແຍ່ງອັນຮຸນແຮງຂອງເສດຖະກິດໂລກທົ່ນນິຍົມ; ການປາບ ປາມທາງດ້ານການເມືອງຢ່າງຮຸນແຮງ, ການສະຖາປະນາລະບອບຟາຊິດ ຢູ່ ຕາມປະເທດຕ່າງໆ; ວິກິດການທາງດ້ານການເມືອງ ແລະ ແນວຄິດ ຂອງ ພວກນາຍທົ່ນ.

ພວກເຮົາມາພິຈາລະນາເບິ່ງປະກິດການຂອງຈຸດສຳຄັນເຫລົ່ານີ້ໃນໄລຍະ ຍຸກສະໄໝວິກິດການຮອບດ້ານແຫ່ງລະບອບທົ່ນນິຍົມ.

ການແບ່ງໂລກອອກ ເປັນສອງລະບົບ

ສົງຄາມໂລກຄັ້ງທີໜຶ່ງປີ ໑໙໑໔-໑໙໑໘ ເກີດ ຂຶ້ນຍ້ອນການຂັດແຍ່ງຢ່າງຮຸນແຮງ ລະຫວ່າງ ບັນດາປະເທດມະຫາອຳນາດຈັກກະພັດ ຊຶ່ງມີ ສາຍເຫດມາຈາກການຕໍ່ສູ້ຍາດຊິງເອົາສ່ວນແບ່ງຂົ້ວໂລກ. ສົງຄາມ ໄດ້ ເຮັດໃຫ້ລະບອບຈັກກະພັດນິຍົມອ່ອນເພຍລົງ ແລະ ໄດ້ສ້າງສະພາບອັນ ເປັນ ຜົນດີໃຫ້ແກ່ການບຸກທະລຸ ແນວໂຮມ ຂອງລະບອບຈັກກະພັດນິຍົມ. ແນວໂຮມ ຂອງລະບອບທົ່ນນິຍົມຖືກທຳລາຍຢູ່ລັດເຊຍ ຊຶ່ງປະກົດເປັນຕ່ອງໂສ້ ອັນ ອ່ອນເພຍທີ່ສຸດຢູ່ໃນສາຍໂສ້ໂລກຂອງລະບອບຈັກກະພັດນິຍົມ ແລະ ເປັນ ຈຸດ ສຸມຂອງໝົດທຸກການຂັດແຍ່ງຂອງລະບອບຈັກກະພັດນິຍົມ. ພາຍຫລັງໄຊຊະ-ນະຂອງການປະຕິວັດກຳມາຊີບ ຢູ່ທີ່ລັດເຊຍແລ້ວ ລັດເຊຍໄດ້ຫລຸດພົ້ນ ອອກ ຈາກລະບົບທົ່ນນິຍົມ ແລະ ໄດ້ເລີ່ມກໍ່ສ້າງລະບອບສັງຄົມນິຍົມຂຶ້ນ ແລະ ພາຍ ໃນກຳນົດເວລາອັນສັ້ນໆ ລັດເຊຍ ກໍໄດ້ຊຸໃຫ້ເຫັນເຖິງທ່າດີເລີດຂອງລະບອບ ສັງຄົມນິຍົມ ເໜືອລະບອບທົ່ນນິຍົມ. ກ່ອນໜ້າການປະຕິວັດສັງຄົມນິຍົມ - ເດືອນຕຸລາ ປີ ໑໙໑໗ ປະເທດລັດເຊຍ ໄດ້ຕົກຢູ່ໃນອັນດັບທີ່ຫ້າ ຂອງໂລກ-ຕາມບໍລິມາດຜະລິດຕະພັນອຸດສາຫະກຳ ແຕ່ພາຍຫລັງ ๘๐ ປີຕໍ່ມາ ຄືຮອດ ປີ ໑໙๗๗-ລັດເຊຍໄດ້ກາຍເປັນອັນດັບທີໜຶ່ງຢູ່ໃນທະວີບເອີລົບ ແລະ ອັນດັບ ທີ່ສອງຢູ່ໃນໂລກ.

ສົງຄາມໂລກຄັ້ງທີ່ສອງໄດ້ກະກຽມຂຶ້ນດ້ວຍກຳລັງປະຕິການສາກົນ ຊຶ່ງ ມີ ກຸ່ມລັດຟາຊິດ-ເຢຍລະມັນ, ຍີ່ປຸ່ນ ແລະ ອິຕາລີ. ສົງຄາມໄດ້ສົ້ນສຸດລົງດ້ວຍ ການທຳລາຍພວກຮຸກຮານຟາຊິດລົງຢ່າງສົ້ນເຊີງ. ສະຫະພາບໂຊວຽດໄດ້ ມີ ບົດບາດອັນຕັດສິນກ່ວາໝູ່ໝົດ ໃນການທຳລາຍພວກຮຸກຮານເຫລົ່ານີ້. ພາຍ

ຫລັງສົງຄາມໂລກຄັ້ງທີສອງຈົບສິ້ນລົງ ຢູ່ໃນທົ່ວໂລກໄດ້ເລີ່ມເກີດມີ ຂະບວນ ການປະຕິວັດປົດປ່ອຍຊາດຂຶ້ນຢ່າງຟົດເຝື່ອທີ່ສຸດ. ຫລາຍປະເທດຢູ່ໃນເອີລົບ ແລະ ອາຊີໄດ້ຫລຸດພົ້ນອອກຈາກລະບົບທຶນນິຍົມ ແລະ ກ້າວເດີນຕາມເສັ້ນ-ທາງກໍ່ສ້າງລະບອບສັງຄົມນິຍົມ. ສິ່ງດັ່ງກ່າວນີ້ ໄດ້ເຮັດໃຫ້ການຊຸ້ງຊຸາກຳລັງ ລະຫວ່າງລະບອບສັງຄົມນິຍົມ ແລະ ລະບອບທຶນນິຍົມເປັນຜົນດີໃຫ້ແກ່ລະບອບ ສັງຄົມນິຍົມ.

ດັ່ງນັ້ນ ຜົນຈາກສົງຄາມໂລກຄັ້ງທີສອງ ຈຶ່ງໄດ້ເຮັດໃຫ້ອິດທິພົນ ຮອບ ດ້ານລະບອບທຶນນິຍົມຮ້າຍແຮງຂຶ້ນອີກ. ຕົກເຂົ້າມາໃນຂັ້ນທີສອງແຫ່ງ ວິ ກິດການຮອບດ້ານດັ່ງກ່າວ ສະແດງໃຫ້ເຫັນວ່າ ລະບອບສັງຄົມນິຍົມ ໄດ້ອອກ ຈາກຂອບເຂດປະເທດໜຶ່ງແລ້ວ ແລະ ກາຍເປັນລະບົບແຫ່ງໂລກ.

ເສດຖະກິດຂອງບັນດາປະເທດສັງຄົມນິຍົມ ໄດ້ຂະຫຍາຍຕົວດ້ວຍຈັງຫວະ ອັນສູງກວ່າເສດຖະກິດຂອງລະບອບທຶນນິຍົມ. ໃນປີ ໑໙໕໐ ບັນດາປະເທດ ສັງຄົມນິຍົມຜະລິດໄດ້ ໘໐% ຂອງຜະລິດຕະພັນອຸດສາຫະກຳໂລກ. ໃນ ປີ ໑໙໖໐ ບໍລິມາດການຜະລິດອຸດສາຫະກຳນີ້ ໄດ້ເພີ່ມຂຶ້ນ ຝ,ຊ ເທື່ອ ໂດຍ ສົມທຽບໃສ່ປີ ໑໙ນ໗ ສ່ວນບັນດາປະເທດທຶນນິຍົມ ຜະລິດໄດ້ຕ່ຳກວ່າ ໔,໕ເທື່ອ.

ຂັ້ນໃໝ່ຂັ້ນທີສາມຂອງວິກິດການຮອບດ້ານແຫ່ງລະບອບທຶນນິຍົມໄດ້ກ້າວ ເຂົ້າມາ. ຈຸດສຳຄັນຕົ້ນຕໍຂອງຂັ້ນນີ້ຢູ່ບ່ອນວ່າ ລະບົບສັງຄົມນິຍົມໂລກ ໄດ ກາຍເປັນປັດໄຈຕັດສິນ ໃຫ້ແກ່ການຂະຫຍາຍຕົວຂອງສັງຄົມມະນຸດ. ເສັ້ນ ທາງຂະຫຍາຍຕົວແຫ່ງສັງຄົມມະນຸດ ກຳນົດດ້ວຍລະບົບສັງຄົມນິຍົມແຫ່ງໂລກ, ດ້ວຍອຸ້ນອຸ້ນກຳມະກອນສາກົນ ແລະ ກຳລັງແຮງປະຕິວັດທັ່ງໝົດ.ສະຫລຸບໄດ ວ່າ ຂັ້ນທີສາມຂອງວິກິດການຮອບດ້ານ ແຫ່ງລະບອບທຶນນິຍົມ ມີລັກສະນະ ພິ ເສດຢູ່ບ່ອນວ່າ ມັນມີການແຂ່ງຂັນຂອງສອງລະບົບໂລກ ຊຶ່ງໃນນັ້ນຍິດບາດ ຂອງລະບອບສັງຄົມນິຍົມນັບມື້ນັບເຂັ້ມແຂງ ສ່ວນລະບອບຈັກກະພັດນິຍົມ ນັບມື້ ນັບສູນເສຍຍິດບາດຂອງຕົນ. ເຊັ່ນຕົວຢ່າງ, ໃນປີ ໑໙໘໐ ບັນດາປະເທດ ສັງຄົມນິຍົມໄດ້ເພີ່ມບໍລິມາດການຜະລິດອຸດສາຫະກຳຂຶ້ນຮອດ ໑໔ ເທື່ອ ໂດຍ ສົມທຽບໃສ່ປີ ໑໙໕໐ ແລະ ໃນເວລາດຽວກັນ ບັນດາປະເທດທຶນນິຍົມ ຂະ ຫຍາຍຕົວປະມານ ນ,ຊ ເທື່ອ.

ຢູ່ໃນຂັ້ນທີສາມ ຂອງວິກິດການຮອບດ້ານແຫ່ງລະບອບທຶນນິຍົມນີ້ ປະເທດ

ກຸຍບາ, ລາວ, ກຳປູເຈຍ ແລະ ອັຟການິສະຖານ ໄດ້ເດີນເຂົ້າສູ່ເສັ້ນທາງ
ແຫ່ງການກໍ່ສ້າງລະບອບສັງຄົມນິຍົມ.

ບັນຫາຕະຫລາດ. ການຫວ່າງງານ ຊຳເຮື້ອແລະໂຮງຈັກໂຮງງານ ຜະ ລິດບໍ່ເຕັມເມັດເຕັມຫນ່ວຍ ຫນຶ່ງໃນຈຳນວນຈຸດສຳຄັນ ທີ່ ສະແດງເຖິງວິກິດການ ຮອບ ດ້ານແຫ່ງລະບອບທຶນນິຍົມ - ແມ່ນບັນຫາຕະຫລາດການຄ້າ ແລະຂົງເຂດການລົງທຶນ. ກ່ອນອື່ນຫມົດ ມັນສະແດງໃຫ້ເຫັນເຖິງຄວາມບໍ່ ສົມດຸນກັນລະຫວ່າງການຜະລິດ ແລະ ຄວາມອາດສາ-ມາດໃນການຈ້າຫມ່າຍສິນຄ້າ. ການຫລຸດພົ້ນຂອງປະເທດລັດເຊຍ ອອກຈາກ ລະບົບທຶນນິຍົມໃນຂັ້ນທຳອິດຂອງວິກິດການຮອບດ້ານ ແຫ່ງລະບອບທຶນນິຍົມໄດ້ ເຮັດໃຫ້ມີການເພີ່ມທະວີການຕໍ່ສູ້ກັນເພື່ອຍາດຊິງເອົາຕະຫຼາດການຄ້າແລະຂົງ ເຂດການລົງທຶນ. ຢູ່ໃນຂັ້ນທີສອງ ຂອງວິກິດການຮອບດ້ານ ແຫ່ງລະບອບທຶນ ນິຍົມ, ຫລັງຈາກການກຳເນີດ ຂອງລະບົບສັງຄົມນິຍົມແຫ່ງໂລກ, ແລະ ຢູ່ ໃນຂັ້ນທີສາມ ຂົງເຂດການກົດຂີ່ຂູດຮີດທຶນນິຍົມ ຍິ່ງຫລຸດຫນ້ອຍຖອຍລົງ.

ການສ້າງຕັ້ງ ລະບົບເສດຖະກິດສັງຄົມນິຍົມແຫ່ງໂລກ ໄດ້ເຮັດໃຫ້ເກີດມີ ຕະຫລາດສັງຄົມນິຍົມໂລກຂຶ້ນ. ໃນປະຈຸບັນນີ້ ມີສອງຕະຫລາດໂລກ ທີ່ ຕ້ານ ກັນຄື: ຕະຫລາດຂອງບັນດາປະເທດສັງຄົມນິຍົມ ແລະ ຕະຫລາດຂອງບັນດາ ປະເທດທຶນນິຍົມ.

ເນື່ອງຈາກຂົງເຂດການກົດຂີ່ຂູດຮີດທຶນນິຍົມ ຫລຸດຫນ້ອຍຖອຍລົງ,ລະບົບ ລ່າອານານິຄົມຂອງລະບອບຈັກກະພັດນິຍົມລົ້ມລະລາຍ, ການຫັນເສດຖະກິດ ໄປໃນທາງການທະຫານ, ວິກິດການທາງດ້ານເສດຖະກິດ ໄດ້ເກີດຂຶ້ນ ຢ່າງ ລຽນຕິດ ແລະ ສະພາບການເປັນຢູ່ຂອງຊາວຜູ້ອອກແຮງງານຊຸດໂຊມນັ້ນ , ການຂັດແຍ້ງຂອງລະບອບທຶນນິຍົມແຫ່ງໂລກ ແລະ ການຕໍ່ສູ້ຍາດຊິງເອົາ ຕະ ຫລາດການຄ້າ ກໍ່ຍິ່ງໄດ້ເພີ່ມທະວີຄວາມຝຶດເຄືອຢ່າງຮ້າຍແຮງຂຶ້ນ. ການຕໍ່ ສູ້ຍາດຊິງເອົາຕະຫລາດຍັງເກີດຂຶ້ນ ຈາກການຊ່ວງເສັ້ງ ຂອງຝ່າຍບັນດາປະ ເທດທຶນນິຍົມ ທີ່ເສດຖະກິດຫລ້າຫລັງອີກ. ປະເທດເຫລົ່ານີ້ ກໍ່ມັກມີ ຄວາມຕ້ອງການຕະຫລາດການຄ້າຊຸ້ນດຽວກັນ ແລະ ໂດຍສະເພາະຢ່າງຍິ່ງ

ແມ່ນຕະຫລາດການຄ້າທີ່ພົວພັນເຖິງຜະລິດຕະພັນອຸດສາຫະກຳເບົາ.

ການຕໍ່ສູ້ຍາດຊິງເອົາຕະຫລາດການຄ້າ ແລະ ຂົງເຂດການລົງທຶນ ໄດ້ ເຮັດໃຫ້ເກີດມີການປະທະກັນຢ້ຳ ລະຫວ່າງກຸ່ມພວກນາຍທຶນຜູກຂາດ, ລະ ຫວ່າງບັນດາປະເທດຈັກກະພັດດ້ວຍກັນ.

ບັນຫາຕະຫລາດ ແລະ ຂົງເຂດການລົງທຶນ ຍັງພົວພັນຢ່າງແໜ້ນ ໜາ ເຖິງ<u>ໂຮງຈັກໂຮງງານອຸດສາຫະກຳທີ່ຊຳເຮ້ຍ ຜະລິດບໍ່ຕັ້ມເມັດຕັ້ມໜ່ວຍ-ການຫວ່າງງານໃນຂອບເຂດອັນກວ້າງຂວາງ.</u>

ກອມສະໄໝແຫ່ງການຂະຫຍາຍຕົວ ຂອງລະບອບທຶນນິຍົມຜູກຂາດນັ້ນ - ໂຮງຈັກໂຮງງານອຸດສາຫະກຳຜະລິດບໍ່ຕັ້ມເມັດຕັ້ມໜ່ວຍ ກໍພຽງແຕ່ໃນໄລ ຍະອີກດ້ານທາງດ້ານເສດຖະກິດເທົ່ານັ້ນ. ໃນປະຈຸບັນນີ້ ຄືໃນໄລຍະ ວິກິດ ການຮອບດ້ານແຫ່ງລະບອບທຶນນິຍົມ ໂຮງຈັກໂຮງງານຜະລິດບໍ່ຕັ້ມເມັດຕັ້ມ ໜ່ວຍ ໄດ້ກາຍເປັນປະກົດການທຳມະດາເສຍແລ້ວ ໝາຍຄວາມວ່າເປັນລັກ ສະນະຊຳເຮ້ຍ.

ການຜະລິດບໍ່ຕັ້ມເມັດຕັ້ມໜ່ວຍແບບຊຳເຮ້ຍ ຂອງໂຮງຈັກໂຮງ ງານ ອຸດສາຫະກຳຍັງພົວພັນເຖິງການຫວ່າງງານ ທີ່ມີລັກສະນະໃໝ່ ໃນໄລຍະ ວິ ກິດການຮອບດ້ານ ແຫ່ງລະບອບທຶນນິຍົມອີກ. ຄາວເມື່ອກ່ອນ ຂະບວນ ຄົນ ຫວ່າງງານ ໄດ້ເກີດຂຶ້ນໃນຊຸມປີວິກິດການເສດຖະກິດ ແຕ່ຢູ່ໃນໄລຍະວິກິດ - ການຮອບດ້ານ ແຫ່ງລະບອບທຶນນິຍົມ ການຫວ່າງງານໄດ້ເກີດຂຶ້ນຢ່າງ ເປັນ ປະຈຳ, ຊຳເຮ້ຍ ແລະ ເປັນຂະບວນ. ໃນປີ ໑໙໓໐ ອັດຕາສ່ວນຂອງ ຄົນ ຫວ່າງງານ: ຢູ່ໃນປະເທດອັງກິດ-໗,໕; ອິຕາລີ ๗,๐; ສະຫະລັດອາເມລິ ກາ-๗,໕; ສະຫະພັນເຢຍລະມັນ-๙,໕; ຍີ່ປຸ່ນ-๑,๙ ໃນຈຳນວນ ທັງໝົດ ຂອງຊາວຜູ້ອອກແຮງງານ.

ຢູ່ໃນຫລາຍໆປະເທດ ໄພຫວ່າງງານໄດ້ກາຍເປັນໄພທຸກຍາກແຫ່ງຊາດ ອັນຍາວນານ. ໃນປີ ໑໙໓໐ ຢູ່ຕາມບັນດາປະເທດທຶນນິຍົມຂະຫຍາຍຕົວ ອາ ເມລິກາເໜືອ ແລະ ເອີລົບຕາເວັນຕົກ ແລະລວມທັງຢູ່ໃນປະເທດຍີ່ປຸ່ນແລະ ອິດສະຕາລີ ລວມມີຊາວກຳມະກອນອຸດສາຫະກຳທັງໝົດ ๑๘๕ ລ້ານຄົນ ๑๙ ລ້ານຄົນແມ່ນຫວ່າງງານຢ່າງສິ້ນເຊີງ. ສ່ວນ ກ່ວ ນັ້ນ ຫ້ອງ ໃນເກົ່າຄົນໃດໄດ້ກາຍເປັນຄົນຫວ່າງງານໂດຍຄົບສະເລ່ຍປານກາງ. ນອກ

ຈາກຜົນຮ້າຍຕ່າງໆແລ້ວ ລະບອບຈັກກະພັດນິຍົມ ຍັງໄດ້ເຮັດໃຫ້ເກີດມີບັນຫາ ໄພຫວ່າງງານຂຶ້ນ ຢູ່ຕາມບັນດາປະເທດກຳລັງພັດທະນາເຊັ່ນດຽວກັນ.

ການປ່ຽນແປງຢູ່ໃນວົງຈອນ ທຶນນິຍົມ

ພວກເຮົາຂໍທວນຄືນວ່າ ວົງຈອນເອີ້ນວ່າ ແມ່ນໄລຍະເລີ່ມ ຈາກວິກິດການ ທາງ ດ້ານເສດຖະກິດຫນຶ່ງຈົນຮອດຕອນ ເລີ່ມ ຕົ້ນຂອງວິກິດການທາງດ້ານເສດຖະກິດຂອງຂັ້ນຕໍ່ໄປ. ວົງຈອນປະກອບ ດ້ວຍ ๔ ພາກ: ພາກວິກິດການ, ຊຸດໂຊມ, ຟື້ນຕົວ ແລະ ຍົກຕົວ.

ໃນໄລຍະວິກິດການຮອບດ້ານແຫ່ງລະບອບທຶນນິຍົມນີ້ ໄດ້ເກີດມີການປ່ຽນ ແປງຢູ່ໃນວົງຈອນທຶນນິຍົມອີກ. ການປ່ຽນແປງເຫລົ່ານີ້ ມີຢູ່ບ່ອນວ່າ ການແກ່ ຍາວວົງຈອນຫລຸດຜ່ອນລົງ ແລະ ໃນຜົນຮັບຂອງມັນຄື ວິກິດການໄດ້ເກີດ ຂຶ້ນ ຢ່າງເນື່ອງນິດລຽນຕິດ. ເຊັ່ນກ່ອນສະໄຫມສົງຄາມໂລກຄັ້ງທີຫນຶ່ງ ວິກິດການ ທາງດ້ານເສດຖະກິດຈະເກີດຂຶ້ນໄດ້ພາຍໃນໄລຍະ ຊ-๑๘ ປີ. ໃນໄລຍະລະ ຫວ່າງສົງຄາມໂລກສອງຄັ້ງ (ແຕ່ປີ ๑ຍ๑ຍ ຫາປີ ๑ຍນໍຊ) ເກີດມີວິກິດ - ການທາງດ້ານເສດຖະກິດ ນ ຄັ້ງ, ຫມາຍຄວາມວ່າ ແຕ່ລະຄັ້ງເກີດຂຶ້ນພາຍ ໃນໄລຍະ ຜ-ກ ປີ. ພ້ອມດຽວກັນນັ້ນ ການແກ່ຍາວພາກວິກິດການ ແລະ - ພາກຊຸດໂຊມ ກໍໄດ້ເພີ່ມຫລາຍຂຶ້ນ ແລະ ພາກຍົກຕົວກໍໄດ້ກາຍເປັນພາກ ທີ່ ຂາດຄວາມຫມັ້ນຄົງ. ເມື່ອຄາວກ່ອນ ວິກິດການໄດ້ແກ່ຍາວເຖິງ ๑,๕-๘ ປີ ແຕ່ວິກິດການປີ ๑ຍ๘ຍ-๑ຍນໍນ ໄດ້ແກ່ຍາວຫລາຍກວ່າ ນ ປີ. ກົງກັນ ຂ້າມ ພາຍຫລັງໄລຍະສົງຄາມ ວິກິດການກໍບໍ່ກວ້າງເລິກ ແລະ ໄລຍະເວລາກໍ ສັ້ນ ເຂົ້າກວ່າເກົ່າເຖິງຈະເກີດມີຂຶ້ນຢ່າງ ລຽນຕິດກໍຕາມ.

ພວກເຮົາຂໍຍົກຕົວຢ່າງສະຫະລັດອາເມລິກາ ຊຶ່ງເປັນປະເທດທີ່ຮັ່ງມີທີ່ສຸດ ຂອງໂລກທຶນນິຍົມ. ພາຍຫລັງສົງຄາມໂລກຄັ້ງທີສອງສັ້ນສຸດລົງ ຄືໃນທາຍ ປີ ๑ຍ๔ຊ ອຸດສາຫະກຳຂອງສະຫະລັດອາເມລິກາ ກໍໄດ້ກະທົບກັບວິກິດການຢ່າງ ແຮງ ຊຶ່ງບີ້ນເລິກຮຸນແຮງມາຮອດຕະຫລອດປີ ๑ຍ๔ຍ. ຈາກທ້າຍປີ ๑ຍ๕ນຢູ່ ໃນສະຫະລັດອາເມລິກາໄດ້ເກີດມີວິກິດການ ທາງດ້ານເສດຖະກິດໃຫມ່ຂຶ້ນຊຶ່ງ ເຮັດໃຫ້ບໍລິມາດການຜະລິດອຸດສາຫະກຳ ແລະ ການສັ່ງຈອງຜະລິດສິນຄ້າ ກໍ ຫລຸດຕຳລົງ, ໄພຫວ່າງງານ ແລະ ສິນຄ້າຄ້າງສາງກໍເພີ່ມທະວີຫລາຍຂຶ້ນ .

ວິກິດການໄດ້ແຜ່ຍາວມາຮອດປີ ໑໗໕໔. ໃນຊ່ວງປີ ໑໗໕໗ ຢູ່ໃນ ສະຫະລັດ ອາເມລິກາ ກໍໄດ້ເກີດມີວິກິດການການຜະລິດ ລົ້ນຕະຫລາດຂຶ້ນອີກເທື່ອ ໃໝ່ ແລະ ແຜ່ຍາວມາຮອດປີ ໑໗໕໘ ຊຶ່ງເປັນປີທີ່ມີສະພາບຮ້າຍແຮງທີ່ສຸດ. ວິກິດ ການທາງດ້ານເສດຖະກິດໄດ້ກວມເອົາໝົດສະຫະລັດອາເມລິກາ ແລະ ຈາກ ນັ້ນກໍແຜ່ລາມອອກເຖິງບັນດາປະເທດທຶນນິຍົມອື່ນໆອີກ. ວິກິດການປີ ໑໗໕໗-໑໗໕໘ ໄດ້ເຮັດໃຫ້ພົນທານການຊຸດສາຫະກຳອາເມລິກາ ບໍ່ສາມາດຍົກຕົວຂຶ້ນ ໄດ້ເປັນເວລາຍາວນານ. ຜ່ານໄປສອງປີຄືໃນປີ ໑໗໖໐ ສະຫະລັດອາເມລິ-ກາ ກໍໄດ້ເລືອຄານຕາມວິກິດການທາງດ້ານເສດຖະກິດຢ່າງໜັກໜ່ວງ ທີ່ສຸດ ອີກຄັ້ງໜຶ່ງ. ວິກິດການດັ່ງກ່າວໄດ້ດຳເນີນມາຮອດປີ ໑໗໖໑.

ໃນຊ່ວງຊຸມປີ ໑໗໖໐ (໑໗໖໔-໑໗໖໖) ບັນດາປະເທດທຶນນິຍົມ ທີ່ພົ້ນ ອອກຈາກວົງຈອນຂົ້ນໆລົ້ງໆເປັນພາກສ່ວນເລັກນ້ອຍນັ້ນ ກໍໄດ້ກະທົບກັບວິກິດ-ການການຜະລິດລົ້ນຕະຫລາດເຊັ່ນດຽວກັນ. ກ່ອນອື່ນໝົດ ມັນເກີດຂຶ້ນ ພຽງ ແຕ່ຢູ່ປະເທດອິຕາລີ, ຝະລັ່ງ, ຍີ່ປຸ່ນ ແລະ ວິກິດການທີ່ຮ້າຍແຮງ ແມ່ນເກີດ ທີ່ສະຫະພັນເຢຍລະມັນ. ໃນເວລານັ້ນ ສົງຄາມຢູ່ຫວຽດນາມໄດ້ເຮັດໃຫ້ວິກິດ ການທີ່ກຳລັງຈະເລີ່ມເກີດຂຶ້ນທີ່ສະຫະລັດອາເມລິກາໄດ້ຢຸດສະງັກ ຜ່ອນຄາຍ-ລົ້ງ ແຕ່ວ່າບໍ່ສາມາດສະກັດກັ້ນວິກິດການເສດຖະກິດ ອັນໃໝ່ໄດ້ ຊຶ່ງໃນທີ່ສຸດ ກໍເກີດຂຶ້ນຢ່າງຮ້າຍແຮງທີ່ສຸດ ໃນປີ ໑໗໗໗ ທີ່ສະຫະລັດອາເມລິກາ.

ວິກິດການທາງດ້ານເສດຖະກິດປີ ໑໗໗໗-໑໗໘໑ ໄດ້ແຕະຕ້ອງບັນດາປະ ເທດທຶນນິຍົມຕ່າງໆ ທັ້ງໝົດເຊັ່ນ: ປະເທດອິຕາລີ, ການາດາ, ຍຸແອດ , ແຟນລັ້ງ ແລະ ໂອຕະຣິດ: ການຜະລິດຊຸດສາຫະກຳກໍຢຸດສະງັກ ແລະ ເລື່ອ ຄານໄປຢ່າງຊັກຊ້າທັ້ງຢູ່ໃນປະເທດສະຫະພັນເຢຍລະມັນ ແລະ ຍີ່ປຸ່ນ.

ຄວາມຫຍຸ້ງຍາກຢ່າງໜັກໜ່ວງທາງດ້ານເສດຖະກິດ ຢູ່ຕາມບັນດາ ປະ ເທດທຶນນິຍົມ ທີ່ຂະຫຍາຍຕົວ ໄດ້ເລີ່ມເກີດຂຶ້ນໃນຕອນທ້າຍປີ ໑໗໗໓ ຊຶ່ງມີ ສາເຫດມາຈາກວິກິດການທາງດ້ານພະລັງງານໄຟຟ້າ ແລະ ວັດຖຸດິບ ແລະ ລວມທັ້ງພົ້ນຈາກໄພເງິນເຟີ້ອັນຮ້າຍແຮງອີກ. ພາຍຫລັງກໍຖືກຕັດຂາດສະບັ້ນ ລົ້ງ.

ໃນປີ ໑໗໗໔ ວິກິດການທາງດ້ານເສດຖະກິດ ທີ່ກວມລວມເອົາໝົດ ລະ ບົບທຶນນິຍົມນັ້ນ ໄດ້ເຮັດໃຫ້ບັນດາປະເທດເຫລົ່ານີ້ໄດ້ພົບພໍ້ກັບສະພາບ ສັງຄົມ

ແລະ ເສດຖະກິດອັນຫນັກຫນ່ວງທີ່ສຸດ. ການຂະຫຍາຍຕົວ ທາງດ້ານເສດຖະ
ກິດຕົກຕ່ຳລົງຢ່າງຮ້າຍແຮງເປັນເວລາຫລາຍປີຕໍ່ເນື່ອງກັນ ແລະ ເກີດມີວິກິດ
ການທົ່ວຂອບເຂດໂລກທາງດ້ານອຸດສາຫະກຳລິດ ແລະ ຕ່ຳແຜ່ນ; ຂອບເຂດ
ການກໍ່ສ້າງອາຄານພັກເຊົາກໍຫລຸດຕ່ຳລົງ ໂດຍທົ່ວໄປ; ວິກິດການທາງດ້ານ-
ນ້ຳມັນເຊື້ອໄຟກໍມີລັກສະນະຮ້າຍແຮງ; ວິກິດການສະບຽງອາຫານ ແລະ ໄພ
ອຸດຕົວກໍເກີດຂຶ້ນຕາມຂົງເຂດທະວີບອາຊີ ແລະ ອາຟະຣິກາ; ໄພເງິນເຟີ້ ກໍ
ແຜ່ລາມ ແລະ ການສູນເສຍທາງດ້ານເງິນຕາຕ່າງປະເທດກໍຫນັກຫນ່ວງ; ໄພ
ຫວ່າງງານຖືບົວສູງຂຶ້ນ, ສະພາບການເປັນຢູ່ທາງດ້ານວັດຖຸຂອງຊາວຜູ້ອອກ
ແຮງງານຊຸດໂຊມລົງ ແລະ ເປັນຜົນໃຫ້ເກີດການຕ້ານຢັນກັນ ລະຫວ່າງແຮງ
ງານ ແລະ ທຶນ ຮຸນແຮງຂຶ້ນ; ການຂັດແຍ່ງລະຫວ່າງພວກຈັກກະພັດດ້ວຍ
ກັນ ຢູ່ໃນຂົງເຂດການພົວພັນເສດຖະກິດຕ່າງປະເທດ ກໍກຳເລີບເຕີບໃຫຍ່ຂຶ້ນ
ແລະ ລະບອບການປ່ອງກັນເສດຖະກິດ ກໍເພີ່ມທະວີສູງຂຶ້ນ ທັງຫມົດນີ້ລ້ວນແຕ່ກິດ
ການສ່ວນຫນຶ່ງ ທີ່ເຮັດໃຫ້ເສດຖະກິດທຶນນິຍົມຊຸດໂຊມລົງ.

ໃນໄລຍະຕໍ່ມາ ວິກິດການທາງດ້ານເສດຖະກິດແຫ່ງການຜະລິດລົ້ນ ຕະ
ຫລາດກໍເກີດຂຶ້ນອີກ ໃນປີ ໑໙໗໔-໑໙໗໕ ມັນສ່ອງແສງເຖິງຂໍ້ຂັດແຍ່ງທີ່ ສະ
ສົມໄວ້ເປັນເວລາຍາວນານ ໃນການພັນຂະຫຍາຍຫມຸນລະບົບທຶນນິຍົມຜູກຂາດ
ແຫ່ງລັດ. ຄວາມຮ້າຍແຮງພິເສດຂອງວິກິດການດັ່ງກ່າວ ໄດ້ລະເບີດຂຶ້ນ ໃນ
ເວລາດຽວກັນ ຢູ່ໃນຫມົດທຸກໆປະເທດທຶນນິຍົມຂະຫຍາຍຕົວ ຖ້າເບິ່ງ ຕາມ
ຄວາມຮ້າຍແຮງ ແລະ ສ່ວນເລິກຂອງມັນແລ້ວ ແມ່ນເທົ່າກັບວິກິດການ ປີ
໑໙໘໙-໑໙໓໓. ຈຸດພິເສດອັນຫນຶ່ງອີກ ຂອງວິກິດການນີ້ ແມ່ນຢູ່ບ່ອນວ່າ ມັນ
ດຳເນີນໄປຄຽງຄູ່ກັບວິກິດການດ້ານອື່ນໆທີ່ກ່ວມຫມົດຂົງເຂດເສດຖະກິດທຶນນິ-
ຍົມໂລກຊຸ້ມ: ວິກິດການພະລັງງານໄຟຟ້າ, ສິ່ງແວດລ້ອມ, ສະບຽງ ອາ
ຫານເປັນຕົ້ນ. ວິກິດການເຫລົ່ານີ້ໄດ້ເຮັດໃຫ້ວົງຈອນວິກິດການ ທາງດ້ານ -
ເສດຖະກິດຍິ່ນເລິກເຂົ້າອີກ ແລະ ໄດ້ເປັນອຸປະສັກ ໃຫ້ແກ່ການແກ້ໄຂ ວິກິດ
ການດັ່ງກ່າວ.

ວິກິດການປີ ໑໙໗໔-໑໙໗໕ ໄດ້ເກີດຂຶ້ນໃນສະພາບວິກິດການເງິນຕາ -
ໂລກ ແລະ ຄວາມຫຍຸ້ງເຫຍີງໃນລະບົບເງິນຫຼຽນຂອງບັນດາປະເທດທຶນນິຍົມ.
ໄພເງິນເຟີ້ໄດ້ອອກນອກຂອບເຂດທີ່ຈະຄວບຄຸມໄວ້ໄດ້ ແລະ ໄດ້ສ້າງ ຄວາມ

ຫຍຸ້ງຍາກໃຫ້ແກ່ຫົນທາງທີ່ຈະຫລຸດພົ້ນອອກຈາກມັນ.

ໃນໄລຍະເວລາວິກິດການປີ ๑ຈກ๔-๑ຈກ๕ ນັ້ນ ໃນປີ ๑ຈກ๕ ການຜະລິດທາງດ້ານອຸດສາຫະກຳຂອງບັນດາປະເທດທຶນນິຍົມຂະຫຍາຍຕົວ ໄດ້ຕົກຕຳ່ລົງເຖິງ ๗,๕%, ການລົງທຶນທັງຫມົດເພື່ອຂະຫຍາຍ ແລະ ປັບປຸງງົບປະ - ມານພື້ນຖານກໍຫລຸດຕຳ່ລົງເຖິງ ๑๐,๕% ແລະ ການກໍ່ສ້າງອາຄານເຮືອນ ຢູ່ -๑๗,๑%. ສະມັດຖະພາບການຜະລິດຂອງບັນດາປະເທດເຫລົ່ານີ້ ກໍໄດ້ ຖືກນຳໃຊ້ແຕ່ ກ๐-ກ๘% ສ່ວນຢູ່ໃນສະຫະລັດອາເມລິກາ-๗๔%.

ການຜະລິດຕົກຕຳ່, ສະມັດຖະພາບການຜະລິດບໍ່ຖືກນຳໃຊ້ຢ່າງເຕັມເມັດເຕັມຫນ່ວຍ ໄດ້ເຮັດໃຫ້ຊາວຜູ້ອອກແຮງງານ ຕ້ອງແບກຫາບພາລະຢ່າງຫນັກຫນ່ວງ ແລະ ພາໃຫ້ເກີດມີໄພຫວ່າງງານຂຶ້ນຢ່າງຫລວງຫລາຍ.

ດວຍເຫດນີ້ ໃນໄລຍະຫລັງສົງຄາມ ເສດຖະກິດຂອງບັນດາປະເທດທຶນນິຍົມຂະຫຍາຍຕົວ ຈົ່ງໄດ້ກະທົບກັບວິກິດການເສດຖະກິດຫລາຍໆຄັ້ງຢ່າງ ຕໍ່ເນື່ອງກັນ. ພ້ອມດຽວກັນ ພາກຕ່າງໆຂອງວົງຈອນວິກິດການທາງດ້ານ ເສດຖະກິດ ກໍມີອັນປ່ຽນແປງ. ພາກວົງຈອນຈຳນວນຫນຶ່ງກໍສູນຫາຍໄປ. ເຊັ່ນຕົວຢ່າງມີເລື້ອຍໆ ທີ່ການຂ້າມຜ່ານຈາກພາກວິກິດການໄປສູ່ພາກຟື້ນຕົວ ດຳເນີນໄປໂດຍບໍ່ໄດຜ່ານຂ້າມພາກຊຸດໂຊມເລີຍ ແລະ ພາກຟື້ນຕົວເອງ ກໍບໍ່ຄ່ອຍຈະກ້າວໄປເຖິງພາກຍົກຕົວແຕ່ຫາກກ້າວໄປເຖິງພາກວິກິດການໃຫມ່ໂລດ. ຢູ່ໃນຫລາຍໆກໍລະນີ ການຂ້າມຜ່ານໄປສູ່ພາກວິກິດການດຳເນີນໄປແບບບໍ່ແຕກ ຫັກບາດຫນຶ່ງບາດດຽວແຕ່ຫາກຄ່ອຍໆຜ່ານໄລຍະອັນຍາວນານເສຍກ່ອນ ກ່ອນຈະເກີດວິກິດການ. ວິກິດການຂະຫຍາຍຕົວຢ່າງຊັກຊ້າໃຊ້ເວລາແກ່ຍາວ ກວ່າຄາວກ່ອນ. ການລົ້ມລະລາຍຂອງທະນາຄານ ແລະ ຂອງຕະຫລາດພິເສດ ບໍ່ມີລັກສະນະເນື່ອງນິດລຽນຕິດເຫມືອນແຕ່ຄາວກ່ອນ. ພາຍຫລັງໄລຍະສົງຄາມ ວິກິດການມີໄລຍະເວລາສັ້ນກວ່າສະໄຫມກ່ອນສົງຄາມໂລກຄັ້ງທີສອງ.

ຢູ່ໃນລະບອບທຶນນິຍົມ ສັງເກດເຫັນວ່າ ບາງຂະແຫນງການຜະລິດ ແລະ ບາງປະເທດມີການຢຸດສະງັກ ແລະ ສະພາບການຜະລິດຕົກຕຳ່ຢ່າງເປັນ ຊຳເຮື້ອ, ຈັງຫວະການຂະຫຍາຍຕົວຊັກຊ້າ.

ນອກນີ້ ກໍຍັງມີປັດໄຈອື່ນໆອີກ ທີ່ເຮັດໃຫ້ມີການປ່ຽນແປງຢູ່ໃນວົງຈອນທຶນນິຍົມໃນໄລຍະຫລັງສົງຄາມ. ບາດກ້າວເດີນຂອງວົງຈອນຢູ່ໃນລະດັບໃດຫນຶ່ງ

ໄດ້ຮັບຜົນສະທ້ອນຈາກການຂະຫຍາຍຕົວ ຂອງລະບອບທຶນນິຍົມຜູກຂາດ ແຫ່ງ ລັດ, ຈາກການແຊກແຊງຂອງລັດເຂົ້າໃນການພົວພັນເສດຖະກິດ ເພື່ອສົ່ງຜົນ ປະໂຫຍດຂອງພວກນາຍທຶນຜູກຂາດ. ໂດຍອາໄສມາດຕະການແກ້ໄຂຂອງລັດ ລະບົບເກັບຊື້ແຫ່ງລັດ ຕໍ່ຜົນຜະລິດອຸດສາຫະກຳ ແລະ ກະສິກຳ, ເງິນ ອຸດ ໜູນ ແລະ ເງິນກູ້ຢືມແຫ່ງລັດສະໜອງໃຫ້ແກ່ພວກນາຍທຶນຜູກຂາດ ແລະ ອື່ນໆ) ພວກນາຍທຶນຜູກຂາດ ໄດ້ພະຍາຍາມເຮັດໃຫ້ກຳລັງທຳລາຍຂອງວິກິດ ການທາງດ້ານເສດຖະກິດຕ່າງໆອ່ອນໂຍນລົງ. ແຕ່ໃນເວລາດຽວກັນ ການ ອອກແຮງຂອງລະບອບທຶນນິຍົມຜູກຂາດແຫ່ງລັດ ໂດຍສຸມໃສ່ແກ້ໄຂວົງຈອນທຶນ ນິຍົມນັ້ນ ບໍ່ສາມາດລົບລ້າງວິກິດການທາງດ້ານເສດຖະກິດແຫ່ງການຜະລິດລົ້ນ ຕະຫລາດລົງໄດ້.

ການຫັນເສດຖະກິດໄປໃນທາງການທະຫານ ກໍ່ສົ່ງຜົນສະທ້ອນຕໍ່ບາດກ້າວ ເດີນຂອງວົງຈອນທຶນນິຍົມຊຸ່ມດຽວກັນ ແຕ່ວ່າຜົນສະທ້ອນຂອງການຫັນ ເສດ ຖະກິດໄປໃນທາງການທະຫານ ມີສອງດ້ານ ແລະ ຂັດແຍ່ງກັນ. ດ້ານໜຶ່ງ, ກໍ່ໃຫ້ເກີດມີການຍົກຕົວອຸ່ອຄາວຂອງບັນດາຂະແໜງການອຸດສາຫະກຳທີ່ພົວພັນ ເຖິງການຜະລິດອາວຸດຍຸດໂທປະກອນ, ສ່ວນອີກດ້ານໜຶ່ງ ມັນເຮັດໃຫ້ສິ້ນ ຕໍ່ ຂໍ້ຂັດແຍ່ງທັງໝົດຂອງການຜະລິດສຳທຶນນິຍົມ ແລະ ສ້າງການລະໂອກາດ ໃຫ້ ແກ່ວິກິດການໃໝ່ທີ່ເລິກເຊິ່ງກວ່າເກົ່າ.

ຄວາມກ້າວໜ້າທາງດ້ານວິທະຍາສາດ-ເຕັກນິກ ກໍ່ສົ່ງຜົນສະທ້ອນ ເຊັ່ນ ດຽວກັນ ຕໍ່ບາດກ້າວເດີນຂອງວົງຈອນ. ລັກສະນະຫລ້າສະໄໝຂອງອຸປະກອນ ການຜະລິດນັບມື້ນັບເພີ່ມທະວີຂຶ້ນ. ເພາະສະນັ້ນ ເຖິງວ່າການລົງທຶນຈະ ຕົກ ຕ່ຳລົງໃນສະໄໝວິກິດການກໍ່ຕາມ ແຕ່ເວົ້າລວມແລ້ວຍັງຄົງຮັກສາຢູ່ໃນລະດັບ ສູງສ່ຳໃດສ່ຳໜຶ່ງ. ສິ່ງດັ່ງກ່າວໄດ້ເຮັດໃຫ້ການຂະຫຍາຍຕົວວົງຈອນມີ ຮູບ ການແບບອື່ນໆເກີດຂຶ້ນອີກ.

ການຕໍ່ສູ້ຊຸ້ມຊຸ້ມຢູ່ໃນບັນດາປະເທດທຶນນິຍົມ ກໍ່ສົ່ງຜົນສະທ້ອນຕໍ່ ບາດກ້າວ ຂະຫຍາຍຕົວຂອງວົງຈອນ. ກຳມະກອນໄດ້ຮັບຜົນສຳເລັດໃນການຕໍ່ສູ້ຍົ້ງຫຼາຍ ຂຶ້ນເທົ່າໃດ ພວກນາຍທຶນກໍ່ຍົ້ງປະນີປະນອມທາງດ້ານເສດຖະກິດຫລາຍຂຶ້ນ - ເທົ່ານັ້ນ. ການຂະຫຍາຍຕະຫລາດພາຍໃນອາດເປັນປັດໄຈອັນໜຶ່ງ ເພື່ອສະ ກັດກັ້ນຄວາມຮຸນແຮງຂອງວິກິດການແຫ່ງການຜະລິດລົ້ນຕະຫລາດ.

ການພັງທະລາຍຂອງລະບົບລ່າຫົວເມືອງຂຶ້ນ ກໍສົ່ງຜົນສະທ້ອນຕໍ່ວົງ ຈອນທຶນນິຍົມເຊັ່ນດຽວກັນ, ມັນສະແດງຕົວອອກຢູ່ບ່ອນວ່າ ປະເທດຕ່າງໆທີ່ໄດ້ຮັບຄວາມເປັນເອກະລາດທາງດ້ານການເມືອງແລ້ວນັ້ນ ກໍຍັງດຳເນີນການ ຕໍ່ສູເພື່ອຄວາມເປັນເອກະລາດທາງດ້ານເສດຖະກິດຂອງຕົນອີກ. ໃນໄລຍະຫຼາຍສິບປີຜ່ານມານີ້ ການຫັນປະເທດໃຫ້ເປັນປະເທດອຸດສາຫະກຳ ໄດ້ອຳນວຍ - ເງື່ອນໄຂໃຫ້ພວກເຂົາເຈົ້າສາມາດເພີ່ມການຊື້ວັດຖຸປະກອນຕ່າງໆຈາກ ປະເທດທຶນນິຍົມຂະຫຍາຍຕົວໄດ້ຫລາຍຂຶ້ນ. ປັດໄຈອັນໃຫມ່ນີ້ ສາມາດຊ່ວຍຊຸກຍູ້ການຜະລິດຢູ່ໃນບັນດາປະເທດທຶນນິຍົມເພີ່ມສູງຂຶ້ນ ແຕ່ຫາກບໍ່ຄົງຕົວຍອນ ວ່າການຊື້ວັດຖຸປະກອນຂອງບັນດາປະເທດກຳລັງພັດທະນາ ມີສະພາບຂຶ້ນໆລົງ ໆ ຊຶ່ງພົວພັນເຖິງການຈຳກັດເງິນຕາຕ່າງປະເທດໃນກໍລະນີ ທີ່ການຂາອອກຂອງພວກເຂົາເຈົ້າຫາກຕົກຕຳ່ລົງ. ທັງຫມົດນີ້ຄືປັດໄຈຈຳນວນຫນຶ່ງ ທີ່ສົ່ງຜົນ ສະທ້ອນຕໍ່ບາດກ້າວເດີນຂອງວົງຈອນທຶນນິຍົມໃນສະໄຫມປະຈຸບັນ.

ໂຮງຈັກໂຮງງານອຸດສາຫະກຳຜະລິດບໍ່ເຕັມເມັດເຕັມຫນ່ວຍ, ໄພຫວ່າງງານ, ວິກິດການທາງດ້ານເສດຖະກິດ ທີ່ເກີດຂຶ້ນຢ່າງລຽນຕິດ ສົງທັງຫມົດນີ້ ສະແດງໃຫ້ເຫັນວ່າ ລະບອບທຶນນິຍົມສະໄຫມໃຫມ່ ບໍ່ຢູ່ໃນສະພາບທີ່ຈະນຳໃຊ້ກຳລັງການຜະລິດທີ່ເຂັ້ມແຂງໄດ້ ແລະ ມັນກໍກາຍເປັນການທ່ວງດຶງ ການຂະຫຍາຍຕົວຂອງກຳລັງການຜະລິດເອງ.

ການຂະຫຍາຍຕົວຂອງປະກົດການ ວິກິດການຢູ່ ໃນລະບົບເສດຖະກິດ ທຶນນິຍົມແຫ່ງໂລກ

ຄຽງຄູ່ກັບວິກິດການທາງ ດ້ານເສດຖະກິດ ການຜະລິດລົ້ນ ຕະຫລາດແລ້ວ ລະບົບເສດຖະກິດ ຂອງໂລກທຶນນິຍົມກໍຍັງໄດ້ ຕົກຢູ່ພາຍໃຕ້ວິກິດການເງິນຕ່າງປະເທດ, ພະລັງງານໄຟຟ້າ, ສະບຽງອາຫານ, ນິເວດວິທະຍາ.

<u>ວິກິດການລະບົບເງິນຕ່າງປະເທດ</u> ຂອງລະບອບຈັກກະພັດນິຍົມ ໄດ້ເກີດຂຶ້ນໃນຕອນທ້າຍຊຸມປີ ຈພຜ້ວ ແລະ ມີປະຫວັດເປັນມາດັ່ງນີ້. ພາຍຫລັງ ສົງຄາມໂລກຄັ້ງທີສອງ ໂດຍອີງໃສ່ສະພາບເປັນເຈົ້າການຂອງອາເມລິກາ ຢູ່ໃນເສດຖະກິດໂລກທຶນນິຍົມນັ້ນ ພວກຈັກກະພັດອາເມລິກາໄດ້ບີບຮັດເງິນຕາຂອງ

ບັນດາປະເທດທຶນນິຍົມອື່ນໆ ໃຫ້ຂໍ້ນກັບເງິນໂດລາອາເມລິກາ. ອີງຕາມ ສັນ ຍາ ບະເຮັດຕັນວູດ ປີ ຈພ๔๔ ເງິນໂດລາໄດ້ທຽບເທົ່າກັບຄຳສິດ ແລະກາຍ ເປັນມາດຕະຖານຄຸນຄ່າສຳລັບເງິນທຶນນິຍົມອື່ນໆ, ຫມາຍຄວາມວ່າ ໄດ້ກາຍ ເປັນເງິນສຳຮອງສູນກາງ. ນອກຈາກນີ້ ເງິນໂດລາຍັງມີສະພາບອະພິສິດ - ຍ້ອນວ່ານັນໄດ້ກາຍເປັນເງິນປະເພດດຽວທີ່ສາມາດແລກປ່ຽນເສລີ ຕໍ່ຄຳ ໄດ້ ດ້ວຍອັດຕາທາງການຕາຍຕົວ ໂດຍຜ່ານຄັງເງິນອາເມລິກາ. ສ່ວນບັນດາປະ ເທດອື່ນໆທີ່ເປັນສະມາຊິກອົງການເງິນຕາສາກົນນັ້ນ ຈຳຕ້ອງໄດ້ຕີລາຄາເງິນ ຂອງຕົນໃສ່ກັບເງິນໂດລາ. ເງິນໂດລາໄດ້ກາຍເປັນພື້ນຖານແຫ່ງລະບົບເງິນ ໂລກທຶນນິຍົມ.

ດ້ວຍສະພາບພິເສດຂອງເງິນຂອງຕົນຢູ່ໃນໂລກທຶນນິຍົມນັ້ນ ສະຫະລັດອາ ເມລິກາ ໄດ້ໃຊ້ຈ່າຍເປັນເງິນໂດລາໃນການລົງທຶນຢູ່ຕາມປະເທດຕ່າງໆແລະ ການໃຊ້ຈ່າຍອື່ນໆທີ່ພົວພັນກັບການເມືອງ ແບບຮຸກຮານຂອງອາເມລິກາ. ແຕ່ ຕົກມາໃນປີ ຈພຜ້ກ ເງິນໂດລາໄດ້ເລີ່ມເຟີ້ ແລະ-ມີຈຳນວນມະຫາສານ ທີ່ ຫມົດຄຸນຄ່າແລ້ວນັ້ນໄດ້ຖືກສະສົມຢູ່ຕາມປະເທດຕ່າງໆໂດຍທົ່ວໆໄປ. ຢູ່ໃນ - ເງື່ອນໄຂນີ້ ທະນາຄານທຶນນິຍົມຂະຫນາດໃຫຍ່ຕ່າງໆ ກໍໄດ້ຢຸດຕິທຳການແລກ ປ່ຽນເງິນໂດລາຕໍ່ຄຳ.

ສ່ວນທາງຝ່າຍລັດຖະບານອາເມລິກາ ກໍໄດ້ຮີບຮ້ອນວາງມາດຕະການ - ດ່ວນຕ່າງໆ ເພື່ອຟື້ນຟູ ເງິນໂດລາ ແລະ ເພື່ອຮັດແຫນ້ນສະພາບການ ຊວງ ເສັງຂອງພວກຈັກກະພັດອາເມລິກາໄວ້ຢູ່ໃນເສດຖະກິດທຶນນິຍົມແຫ່ງໂລກ. ໃນ ປີ ຈພກຈ ສະຫະລັດອາເມລິກາ ໄດ້ຢຸດຕິການແລກປ່ຽນໂດລາຕໍ່ຄຳ. ໃນປີ ຈພກຈ ແລະ ປີ ຈພກຜ້ ເງິນໂດລາຖືກຫລຸດລາຄາລົງ. ຄຳຄຳ້ປະກັນ ເງິນ ຕ່າງໆກໍຖືກຍົກເລີກໂດຍທັງຫມົດ ແລະ ວາງລະບົບການໃຫມ່ ທີ່ເອີ້ນກັນ ວ່າ ອັດຕາແລກປ່ຽນເງິນລອຍ. ລະບົບບະເຮັດຕັນວູດ ໄດ້ຈົບສິ້ນລົງຢ່າງສິ້ນເຊີງ. ການກ້າວເຂົ້າສູ່ອັດຕາສົມທຽບທີ່ມີລັກສະນະປ່ຽນແປງເລື້ອຍໆລະຫວ່າງ ຊຸມ ເງິນຕາຂອງບັນດາປະເທດທຶນນິຍົມນັ້ນ ໄດ້ຖືກຮັບຮອງເອົາຢ່າງເປັນ ທາງ ການດ້ວຍສັນຍາຄິງສະໂຕນ ປີ ຈພກຜ້.

ວິກິດການເງິນຕ່າງປະເທດ ແມ່ນການແຕກຫັກຢ່າງຮ້າຍແຮງຂອງລະບົບ ການເງິນ-ເງິນກູ້ຢືມພາຍໃນ ແລະ ການພົວພັນການເງິນ-ເງິນສາກົນ ຂອງ

ບັນດາປະເທດທຸນນິຍົມນັ້ນ ກ່ອນອື່ນໝົດ ມັນສະແດງຕົວອອກໃນການລົບລ້າງ ມາດຕະຖານຄຳ. ລັກສະນະພິເສດຂອງວິກິດການເງິນຕ່າງປະເທດ ແມ່ນໄພ ເງິນເຟ້, ການຂາດດຸນດ່ຽງແລະຄວາມດຸນດ່ຽງທີ່ລັກສະນະບໍ່ຄົງຕົວຢ້ຳໆລ້ຳໆ ໃນການຊຳລະສະສາງກັນ, ການປ່ຽນແປງຢ່າງຫລວງຫລາຍ ທາງດ້ານ ລາ ຄາຢູ່ຕາມປະເທດຕ່າງໆ, ການປ່ຽນແປງຂອງອັດຕາແລກປ່ຽນເງິນຕາ ຕ່າງ ປະເທດທີ່ຄາດຄະເນລວງໜ້າບໍ່ໄດ້, ການປ່ຽນແປງໂຄງປະກອບ ແລະການ ແບ່ງແຍກເງິນສຳຮອງ. ບັນດາປະເທດທຸນນິຍົມຕົ້ນຕໍໄດ້ພາກັນສືບຕໍ່ຊອກ ຫົນ ທາງແກ້ໄຂວິກິດການເງິນຕ່າງປະເທດໃຫ້ອ່ອນໂຍນລົງ. ແຕ່ໃນເວລາດຽວ-ກັນ ຢູ່ໃນລະບອບທຸນນິຍົມ ແມ່ນເປັນໄປບໍ່ໄດ້ທີ່ຈະລົບລ້າງຮາກຖານຕົ້ນ ເຫດ ຂອງວິກິດການເງິນຕ່າງປະເທດ. ຜົນຮ້າຍຈາກວິກິດການນີ້ ໄດ້ຕົກໄປສູ່ຊາວ ຜູ້ອອກແຮງງານທັງໝົດ.

ວິກິດການລະບົບເງິນຈັກກະພັດນິຍົມ ແມ່ນໜຶ່ງໃນປະກົດການອັນຈະແຈ້ງ ແຫ່ງວິກິດການຮອບດ້ານຂອງລະບອບຈັກກະພັດນິຍົມ. ມັນສົ່ງຜົນສະທ້ອນຕົ້ນ-ແກ່ການຜະລິດສຳ, ຫລຸດຜ່ອນຈັງຫວະການເຕີບໃຫຍ່ ຂອງການຜະລິດສຳ, ສ້າງຄວາມບໍ່ເຊື່ອໝັ້ນໃນອະນາຄົດ ແລະ ສ້າງຄວາມຫຍຸ້ງຍາກໃຫ້ແກ່ ການ ຄ້າຕ່າງປະເທດ.

<u>ວິກິດການພະລັງງານໄຟຟ້າ</u> ໄດ້ສ້າງຄວາມຫຍຸ້ງຍາກຢ່າງຫລວງຫລາຍ-ໃຫ້ແກ່ເສດຖະກິດທຸນນິຍົມ. ມັນເກີດຂຶ້ນຢູ່ໃນອຸດສາຫະກຳນ້ຳມັນເຊື້ອໄຟ ຊຶ່ງ ກຸ່ມຜູກຂາດນ້ຳມັນເຈັດກຸ່ມໃຫຍ່ໄດ້ຄວບຄຸມ ແລະ ທຳການດຳເນີນການຂຸດຄົ້ນ ນ້ຳມັນຢູ່ໃນບັນດາປະເທດອະດີດຫົວເມືອງຂຶ້ນ ແລະ ອະນາມິຄົມຕ່າງໆ.ພວກ ເຂົາເຈົ້າຈະໄດ້ຮັບກຳໄລອັນມະຫາສານຍ້ອນວ່າ ມີຄວາມຮຽກຮ້ອງຕ້ອງ ການຕໍ່ນ້ຳມັນເຊື້ອໄຟສູງ. ບັນດາປະເທດຜູ້ຂາຍນ້ຳມັນໄດ້ຮ່ວມກັນສ້າງຕັ້ງອົງ ການນ້ຳມັນຕາມຈັກກະພັດຂຶ້ນ ໂດຍທຳການຍຶດເອົາກຳມະສິດຜູກຂາດນ້ຳ ມັນ ມາເປັນຂອງລັດ. ລາຄານ້ຳມັນໄດ້ຖີບຕົວສູງຂຶ້ນ. ຢູ່ໃນເງື່ອນໄຂລະບົບເສດ ຖະກິດທຸນນິຍົມແຫ່ງໂລກນີ້ ແມ່ນເປັນໄປບໍ່ໄດ້ທີ່ຈະຮັດໃຫ້ມີຄວາມດຸນດ່ຽງກັນ ລະຫວ່າງການຜະລິດ ແລະ ການຊົມໃຊ້ພະລັງງານໄຟຟ້າ. ຄວາມຂາດແຄນ ພະລັງງານໄຟຟ້າກໍເກີດ ມີຂຶ້ນຢ່າງຮ້າຍແຮງ. ວິກິດການພະລັງງານ ໄຟຟ້າ ໄດ້ຊ່ວຍໃຫ້ພວກຜູກຂາດນ້ຳມັນໄດ້ຮັບກຳໄລຕື່ມອີກຢ່າງຫລວງຫລາຍທີ່ສຸດ ແຕ

ໃນເວລາດຽວກັນນັ້ນ ວິກິດການດັ່ງກ່າວກໍໄດ້ສ້າງຄວາມກະທົບກະເທືອນຢ່າງ ຫນັກຫນ່ວງຕໍ່ເສດຖະກິດຂອງບັນດາປະເທດທີ່ປົດປ່ອຍໃຫມ່ ແລະ ຕໍ່ ສະພາບ ການເປັນຢູ່ຂອງຊາວຜູ້ອອກແຮງງານຢູ່ໃນໂລກທຶນນິຍົມ. ວິກິດການພະລັງ - ງານໄດ້ເຮັດໃຫ້ລະບອບຈັກກະພັດນິຍົມ ເກີດມີຂໍ້ຂັດແຍ່ງນັບມື້ນັບຮ້າຍແຮງຂຶ້ນ.

ໃນໄລຍະຫລາຍສິບປີຫລັງມານີ້ ສັງຄົມມະນຸດ ໄດ້ພົບກັບບັນຫາ <u>ວິກິດ-ການທາງນິເວດວິທະຍາ</u> ຂຶ້ນອີກ. ການນຳໃຊ້ແຫລ່ງຊັບພະຍາກອນທຳມະ ຊາດຢ່າງຊະຊາຍ ແລະ ປ່າເຖື່ອນຂອງລະບອບທຶນນິຍົມ, ສ້າງແວດລ້ອມ - ເປື້ອນເປິ ທັງຫມົດນີ້ໄດ້ເປັນພິນຮ້າຍໃຫ້ແກ່ການຟື້ນຟູເສີມຂະຫຍາຍເສດຖະ-ກິດດ້ວຍການໝູນໃຊ້ຊັບພະຍາກອນທຳມະຊາດ. ພວກນາຍທຶນຜູກຂາດ ໄດ້ ນຳໃຊ້ມາຍແກ້ໄຂບັນຫາດັ່ງກ່າວ ດ້ວຍວິທີການທຶນນິຍົມເຊັ່ນ: ທຳການຕັດ ຕ້ອງ ການຜະລິດທີ່ເປັນພິດ ແລະ "ເປື້ອນເປິ" ຕ່າງໆນຶ່ນຢູ່ຕາມດິນແດນຂອງບັນ ດາປະເທດກຳລັງພັດທະນາ (ເຂມີນຳ້ມັນ, ຂຸດຄົ້ນໂລຫະ ແລະ ອື່ນໆ) ແຕ່ ວິທີການປົກປັກຮັກສາສິ່ງແວດລ້ອມດັ່ງກ່າວ ໄດກາຍເປັນບໍ່ເກີດຜົນຕາມ ຈຸດປະສົງຂອງພວກນາຍທຶນຜູກຂາດເອງ.

ທຸກໆປະກົດການແຫ່ງວິກິດການທັງຫມົດທີ່ກະທົບໃສ່ເສດຖະກິດທຶນນິຍົມ ນັ້ນ ໄດ້ຢືນຢັນໃຫ້ເຫັນເຖິງການສືບຕໍ່ຂະຫຍາຍຕົວຂອງວິກິດການຮອບດ້ານແຫ່ງລະ ບອບທຶນນິຍົມ. ໂລກປະກອບທາງດ້ານເສດຖະກິດ ແລະ ສັງຄົມຂອງສັງຄົມ-ທຶນນິຍົມ ນັບມື້ນັບຂັດແຍ່ງກັບຄວາມມຸ່ງມາດປາຖະຫນາຂອງມວນຊົນ, ກັບ ຄວາມຮຽກຮ້ອງຕ້ອງການດ້ານຄວາມກ້າວຫນ້າຂອງສັງຄົມ, ການເສີມຂະ - ຫຍາຍປະຊາທິປະໄຕ ແລະ ການເມືອງ.

ຄວາມຮ້າຍແຮງຂອງວິກິດການຮອບດ້ານແຫ່ງລະບອບ ທຶນນິຍົມ

ໃນຊຸມປີ ໑໙໗໐ ວິກິດການຮອບດ້ານແຫ່ງລະບອບທຶນນິຍົມ ໄດ້ ເຂົ້າສູ່ໄລຍະໃຫ້ມ່ ຫລາຍປະເທດ ກອມ ເອົາເສດຖະກິດ, ການເມືອງ, ແນວຄິດ ແລະ ຫມົດທົ່ວຂົງເຂດສັງຄົມທຶນນິ ຍົມ. ຈຸດພິເສດຂອງວິກິດການໃນປະຈຸບັນນີ້ ມີລັກສະນະໃດ ?

ສິ່ງສຳຄັນທີ່ສຸດ ມີຢູ່ບ່ອນວ່າ ມັນເກີດຂຶ້ນຢູ່ໃນເງື່ອນໄຂສະພາບການຕົບ ໃຫ້ຍ່ະຫຍາຍຕົວແຫ່ງຂະບວນການປະຕິວັດໂລກ: ຄວາມເຂັ້ມແຂງຂອງ ລະ

ບອບສັງຄົມນິຍົມ; ຂະບວນການປົດປ່ອຍຊາດ ແລະ ຂະບວນການກຳມະກອນໂລກ ທີ່ແຜ່ລາມອອກຢ່າງກວ້າງຂວາງ. ຢູ່ໃນບົດລາຍງານຂອງສູນກາງ ພັກ ພ.ກ.ສ.ຊ ໃນອາລະກອງປະຊຸມໃຫຍ່ຄັ້ງທີ ๘ฝ ໄດ້ບົ່ງໄວ້ວ່າ ຊຸມປີ ๑ฝ๐ ແມ່ນເປັນ "ຊຸມປີແຫ່ງການສືບຕໍ່ນຸກນຶ່ນຢ່າງຕັ້ງໜ້າ ແລະ ແມ່ນຊຸມປີແຫ່ງອົດທົນຂອງສະຫະພາບໂຊວຽດ ແລະ ບັນດາປະເທດອື່ນໆໃນວົງສາຄະນາຍາດສັງຄົມນິຍົມ. ໄຊຊະນະໃໝ່ໄດ້ຕົກເປັນຂອງການຕໍ່ສູ້ປະຕິວັດຂອງມວນປະຊາກອນຕ່າງໆ...ຄວາມຈິງແລ້ວ ໃນຊຸມປີ ๑ฝ๐ ການລົບລ້າງຫົວເມືອງ ຊົ້ນໄດ້ຖືວ່າຈົບສົ້ນລົງໂດຍສົ້ນເຊີງ. ວົງເຂດຄວບຄຸມຂອງຈັກກະພັດຢູ່ໃນໂລກໄດ້ຫລຸດໜ້ອຍຖອຍລົງ, ຂໍ້ຂັດແຍ່ງພາຍໃນຢູ່ໃນບັນດາປະເທດທຶນນິຍົມແລະປະເທດຄູ່ແຂ່ງດ້ວຍກັນ ກໍຮຸນແຮງຂົ້ນ" ๑).

ປະກົດການທີ່ແຈ້ງຊັດທີ່ສຸດແຫ່ງການເພີ່ມທະວີຂັ້ດແຍ່ງທຶນນິຍົມ ຢູ່ ໃນຂະແໜງການເສດຖະກິດນັ້ນ ແມ່ນການເພີ່ມທະວີຄວາມບໍ່ຄົງທີ່ຂອງວົງ ຈອນຕ່າງໆ. ໃນຕະຫລອດສິບປີຜ່ານມານີ້ ລະບອບທຶນນິຍົມໄດ້ກະທົບກັບວິກິດການທາງດ້ານການຜະລິດ ສາມຄັ້ງດ້ວຍກັນ. ໜຶ່ງໃນຈຳນວນສາມຄັ້ງນັ້ນ ແມ່ນວິກິດການທາງດ້ານເສດຖະກິດໂລກ ປີ ๑ฝ๓-๑ฝ๔ ແມ່ນວິກິດການການຜະລິດລົ້ນຕະຫລາດທີ່ຮ້າຍແຮງທີ່ສຸດ ນັບຈາກສະໄໝຊຸມປີ ๑ฝ๓๐ ເປັນຕົ້ນມາ. ໃນຕົ້ນຊຸມປີ ๑ฝ๘๐ ໂລກທຶນນິຍົມ ຍັງໄດ້ພົບກັບພົ້ນຮ້າຍທາງດ້ານເສດຖະກິດຢ່າງໜັກໜ່ວງອີກ. ໄພຫວ່າງງານໄດ້ເພີ່ມສູງຂົ້ນຊ້ຳສ້າງຄວາມທຸກຍາກລຳບາກຢ່າງແສນສາຫັດ ໃຫ້ແກ່ມວນມະນຸດນັບເປັນສິບໆລ້ານຄົນ.

ຄຽງຄູ່ກັບການຂັດແຍ່ງແຫ່ງວົງຈອນ ການຜະລິດສຳແລ້ວ ກໍຍັງເກີດມີຮູບລັກສະນະວິກິດການຕ່າງໆຂົ້ນອີກຢູ່ຕາມຂະແໜງການເສດຖະກິດຕົ້ນຕໍ ຂອງ-ບັນດາປະເທດທຶນນິຍົມອຸດສາຫະກຳຂະຫຍາຍຕົວ. ມັນສະແດງຕົວອອກ ໃນ ການຢຸດສະງັກທາງດ້ານການຜະລິດຢູ່ໃນອຸດສາຫະກຳໂລຫະ, ການຜະລິດລົດ, ວິກິດການພະລັງງານອັນໜັກໜ່ວງ, ບັນຫາວັດຖຸດິບອັນຮຸນແຮງ. ໂດຍທົ່ວ-ໄປແລ້ວ ຢູ່ໃນໂລກທຶນນິຍົມ ສະເພາະຢ່າງຍິ່ງຢູ່ໃນສະຫະລັດອາເມລິກາແລະ

---

๑) ເອກະສານກອງປະຊຸມໃຫຍ່ຄັ້ງທີ ๘ฝ ຂອງ ພ.ກ.ສ.ຊ. ມົດສະກູ,ສຳນັກພິມ "ໂປລິດອິດຊະດາດ, ๑ฝ๘๑,ໜ້າ ๔.

ອັງກິດ ຈັງຫວະການເພີ່ມຂຶ້ນ ຂອງການຜະລິດສັງຄົມ ແລະ ສະມັດຖະພາບ ແຮງງານຕົກຕ່ຳລົງຢ່າງຫລວງຫລາຍ, ຄວາມກ້າວໜ້າທາງດ້ານວິທະຍາ - ສາດ-ເຕັກນິກ ກໍດຳເນີນຕໍ່ໄປຢ່າງເຊື່ອງຊ້າ ໄພເງິນເຟີ້ກໍເກີດຂຶ້ນໃນຂອບ ເຂດທີ່ກ້ວາງຂວາງທີ່ສຸດ. ນັບແຕ່ປີ ໑໙໗໐ ຢູ່ໃນບັນດາປະເທດທຶນນິຍົມ ທີ່ ຂະຫຍາຍຕົວ ລາຄາສິນຄ້າໄດ້ຖີບຕົວສູງຂຶ້ນໃນຂະໜາດປານກາງເຖິງ ๘,๗ ເທື່ອ, ແລະນັບແຕ່ປີ ໑໙๘๕-๑,๕ ເທື່ອ. ວົງກ້ວາງຂອງໄພເງິນເຟີ້ ຍັງ ແຜ່ລາມອອກ.

ທຶນຜູກຂາດທີ່ສົ່ງຜົນສະທ້ອນ ແກ່ລະດັບການເປັນຢູ່ ແລະ ສິດທິຂອງ - ຊາວຜູ້ອອກແຮງງານ ໄດ້ເຮັດໃຫ້ເກີດມີການຕໍ່ສູ້ຊຸມຊຸ້ນອັນໃໝ່ຂຶ້ນ. ແຕ່ ໃນ ເວລາດຽວກັນ ທຸກຄວາມພະຍາຍາມເພື່ອຫລຸດຜ່ອນການຕໍ່ສູ້ຊຸມຊຸ້ນ ໂດຍການ ປະຕິຮູບສັງຄົມດ້ວຍວິທີການໃດໜຶ່ງນັ້ນ ແມ່ນບໍ່ໄດ້ຮັບຜົນແຕ່ປະການໃດເລີຍ. ໃນຊຸມປີ ໑໙໗໐ ຈຳນວນຜູ້ເຂົ້າຮ່ວມການເດີນປະທ້ວງໄດ້ເພີ່ມສູງຂຶ້ນ ຫລາຍ ກວ່າ ๑/๗ ແລະຕາມຕົວເລກທາງການແລ້ວ ມີເຖິງ ๘๕๐ ລ້ານຄົນ. ຮູບ ການຕໍ່ສູ້ອັນດຸເດືອດນີ້ ໄດ້ຂະຫຍາຍກ້ວາງອອກ ແລະ ພົ້ນເດ່ນແມ່ນເກີດມີການ ເຂົ້າຍຶດໂຮງຈັກໂຮງງານໂດຍພວກນັກປະທ້ວງຫັ້ງຫລາຍ ດ້ວຍຈຸດປະສົງ ບໍ່ ຢາກໃຫ້ໂຮງຈັກໂຮງງານເຫລົ່ານັ້ນຖືກປິດ ແລະ ບໍ່ໃຫ້ມີການຍັບໄລ່ກຳມະ - ກອນຈຳນວນຫລວງຫລາຍອອກຈາກໂຮງຈັກໂຮງງານ.

ຂະບວນກຳມະກອນໄດ້ເກີດຄວາມເຂົ້າໃຈດີຕໍ່ຄວາມຈຳເປັນໃນການຕໍ່ ສູ້ ຕ້ານທຸກຄວາມພະຍາຍາມຂອງພວກນາຍທຶນ ທີ່ນຳເອົາຜົນຮ້າຍຈາກວິກິດການ ທາງດ້ານເສດຖະກິດໄປສູ່ຊາວຜູ້ອອກແຮງງານທັ້ງໝົດ, ຄວາມເຂົ້າໃຈ ຕໍ່ ຄວາມຈຳເປັນໃນການດຳເນີນການຕໍ່ສູ້ເພື່ອດັດສ້າງແບບສັງຄົມ-ປະຊາທິປະ-ໄຕແລະຕ້ານເງິນທຶນຜູກຂາດ. ພັກກອມມູນິດ ແລະ ພັກກຳມະກອນຂອງ ບັນ ດາປະເທດທຶນນິຍົມຕ່າງໆ ໄດ້ອອກແຮງຂົນຂວາຍ ແລະ ຈັດຕັ້ງນຳພາການຕໍ່ ສູ້ເພື່ອເຮັດໃຫ້ຈຸດປະສົງດັ່ງກ່າວໄດ້ປະກົດຕົວຂຶ້ນເປັນຈິງ.

ການຂັດແຍ້ງອັນຮ້າຍແຮງທາງດ້ານສັງຄົມ-ການເມືອງ ແລະ ເສດຖະ-ກິດຂອງລະບອບທຶນນິຍົມ ໄດ້ເຮັດໃຫ້ເກີດມີເງື່ອນໄຂອັນໃໝ່ສຳລັບການ ຕັ້ງ ໜ້າບຸກບືນຂອງໜົດທຸກກຳລັງກ້າວໜ້າຕາມການຜູກຂາດ, ສຳລັບການ ຜັນ ຂະຫຍາຍການຕໍ່ສູ້ເພື່ອສັນຕິພາບ, ປະຊາທິປະໄຕ ແລະ ຄວາມກ້າວ ໜ້າ

ທາງສັງຄົມ. ເພື່ອສຳເລັດເງື່ອນໄຂເຫລົ່ານັ້ນ ພວກເຮົາ ແມ່ນຈັ້ນ ຕ້ອງ ຮັດແໜ້ນຄວາມສາມັກຄີ ແລະ ຄວາມເປັນເອກະພາບກັນຂອງທຸກໆ ຖັ້ນແຖວ ຂະບວນການປະຕິວັດໂລກ ແລະ ນອກນັ້ນກໍ່ຍັງຈຳເປັນຕ້ອງຮ່ວມມືກັບ ມວນຊົນເຄື່ອນໄຫວທາງດ້ານ ການເມືອງ ແລະ ແນວຄິດຂອງບັນດາກອງບັນຊາ ຂອງຂະບວນການ ດັ່ງ ກ່າວຄືພັກກອມມູນິດ ແລະ ພັກກຳມະກອນຕ່າງໆ.

๔. ການພັງທະລາຍຂອງລະບົບລ່າທິວເມືອງຈ້ຳແຫ່ງ ລະບອບຈັກກະພັດນິຍົມ ແລະ ເສັ້ນທາງຂະຫຍາຍຕົວ ຂອງບັນດາປະເທດທີ່ໄດ້ຮັບການປົດປ່ອຍໃໝ່

ການພັງທະລາຍຂອງລະບົບລ່າທິວເມືອງຈ້ຳ. ລັດທິລ່າທິວເມືອງຈ້ຳ ແບບໃໝ່ ພາຍໃຕ້ຜົນສະທ້ອນ ຂອງ ມະຫາປະຕິວັດສັງຄົມນິຍົມ ເດືອນຕຸລາ ຢູ່ທີ່ ລັດເຊຍ ນັ້ນ ການຕໍ່ສູ້ຂອງປະຊາຊາດຂອງບັນດາປະເທດທິວເມືອງຈ້ຳຕ່າງໆ ເພື່ອ-ການປົດປ່ອຍແຫ່ງຊາດຕົນ ກໍຮຸນແຮງຈ້ຳ ແລະ ວິກິດການຂອງລະບົບ ລ່າທິວ ເມືອງຈ້ຳແຫ່ງລະບອບຈັກກະພັດນິຍົມ ກໍໄດ້ເລິ້ມເກີດຈ້ຳ.

<u>ວິກິດການຂອງລະບົບລ່າທິວເມືອງຈ້ຳແຫ່ງລະບອບຈັກກະພັດນິຍົມ</u> ແມ່ນ ໝາຍເຖິງການຂັດແຍ່ງຢ່າງຮຸນແຮງທີ່ສຸດ ລະຫວ່າງບັນດາປະເທດມະຫາອຳ ນາດຈັກກະພັດ ແລະ ບັນດາທິວເມືອງຈ້ຳ, ອະນານິຄົມຕ່າງໆ. ການ ຕໍ່ສູ້ ຂອງຂະບວນການປົດປ່ອຍຊາດ ເຮັດໃຫ້ບັນດາທິວເມືອງຈ້ຳ ແລະ ອະນານິ-ຄົມຕ່າງໆ ໄດ້ຮັບການປົດປ່ອຍຈາກແອກຄອບຄອງຂອງຈັກກະພັດ.

ໃນຊຸມປີສົງຄາມໂລກຄັ້ງທີ່ໜຶ່ງ ບັນດາປະເທດຈັກກະພັດ-ເຈົ້າທິວເມືອງ ຈ້ຳບໍ່ສາມາດສະໜອງສິນຄ້າອຸດສາຫະກຳໃຫ້ແກ່ບັນດາທິວເມືອງຈ້ຳໄດ້ ຍອມ ວ່າອຸດສາຫະກຳຂອງປະເທດຈັກກະພັດເຫລົ່ານັ້ນ ລ້ວນແຕ່ທຳການຜະລິດທາງ ດ້ານການທະຫານ. ຢູ່ຕາມບັນດາທິວເມືອງຈ້ຳຕ່າງໆ ອຸດສາຫະກຳໄດ້ ເລີ່ມ ຂະຫຍາຍຕົວຈ້ຳຢ່າງວ່ອງໄວ ແລະ ກ່ອນໜ້ານີ້ ແມ່ນອຸດສາຫະກຳເບົາ , ພິເສດແມ່ນການຕຳ່ແຜ່ນ. ໂຮງຈັກໂຮງງານອຸດສາຫະກຳກໍໄດ້ຮັບການ ຂະ ຫຍາຍກ້ວ້າງອອກ ແລະ ເກີດມີໂຮງຈັກໂຮງງານໃໝ່ໆຈ້ຳ. ຈຳນວນ ຊາວ

ກຳມາຊີບ ຊຶ່ງເປັນຊົນຊັ້ນປະຕິວັດສຸດຍອດຂອງສັງຄົມທຶນນິຍົມກໍສູງຂຶ້ນ.

ຊາວກຳມາຊີບພ້ອມດ້ວຍຊາວໄຮ່ນາ ທີ່ປະກອບເປັນສ່ວນຫລາຍຂອງ ປະຊາກອນຫົວເມືອງຂຶ້ນ ໄດ້ດຳເນີນການຕໍ່ສູ້ຢ່າງແຂງແຮງຕາມກັບລະບອບ ຈັກກະພັດນິຍົມ. ແຕ່ໃນເວລາດຽວກັນ ກໍເກີດມີນາຍທຶນແຫ່ງຊາດຂຶ້ນ, ສິດຜົນ-ປະໂຫຍດຂອງພວກນີ້ ພັດຂັດກັບການຄຸມຂອງຂອງພວກນາຍທຶນຜູກຂາດຕ່າງ-ດາວ.

ບັນຫາການຂະຫຍາຍຕົວ ທາງດ້ານເສດຖະກິດ ຂອງບັນດາປະເທດ ຫົວເມືອງຂຶ້ນ ແລະ ພາຍໃຕ້ຜົນສະທ້ອນຂອງມະຫາປະຕິວັດສັງຄົມນິຍົມເດືອນ ຕຸລານັ້ນ ຂະບວນການປົດປ່ອຍຊາດໄດ້ມີບົດບາດ ແລະ ຮູບການຕ່າງໆຊຶ່ງ ບໍ່ເຄີຍເຫັນມາກ່ອນສະໄໝສົງຄາມໂລກຄັ້ງທີໜຶ່ງເລີຍ. ສົງເກດຕີລາຄາຕໍ່ຂະ ບວນການນີ້, ອ.ອິ.ເລນິນ ໄດ້ຂຽນວ່າ "ທິດຕາເວັນອອກ...ໄດ້ມາ ເຖິງ ບັ້ນຂະບວນການປະຕິວັດຢ່າງຊາດຕົວ ຍອມຜົນຈາກສົງຄາມຈັກກະພັດຄັ້ງ ທີ ໜຶ່ງນັ້ນເອງ, ໄດ້ກ້າວເຂົ້າສູ່ຂະບວນການປະຕິວັດທົ່ວໂລກແລ້ວ "๑).

ຫລັງຈາກສົງຄາມໂລກຄັ້ງທີໜຶ່ງ ບັ້ນບັນດາຫົວເມືອງຂຶ້ນ ແລະ ອະນານິ ຄົມໃດເລີຍ ທີ່ຈະບໍ່ເກີດມີການລຸກຮືຂະຫນາດໃຫຍ່ຕາມລະບອບຈັກກະພັດນິຍົມ. ໂດຍສະເພາະຢ່າງຍິ່ງ ຂະບວນການປົດປ່ອຍຊາດໄດ້ເກີດຂຶ້ນ ແຜ່ລາມ ຢ່າງ ກ້ວາງຂວາງທີ່ສຸດ ຢູ່ຕາມບັນດາປະເທດເຂດອາຊີ. ໃນປີ ๑๗๘๔ ສາທາລະ ນະລັດປະຊາຊົນມົງໂກລີ ໄດ້ກ້າວເຂົ້າສູ່ເສັ້ນທາງຂະຫຍາຍຕົວແບບສັງຄົມນິ ຍົມ. ປະເທດຕຸກກີ ແລະ ອັຟການິສະຖານ ກໍໄດ້ຮັບ ຄວາມເປັນເອກະລາດ ທາງການເມືອງ. ຂະບວນການປົດປ່ອຍຊາດອັນຟົດເດືອດທີ່ສຸດກໍໄດ້ເກີດຂຶ້ນຢູ່ ປະເທດຈີນ, ອິນເດຍ, ອິນໂດເນເຊຍ ແລະ ປະເທດອື່ນໆ. ຊົນຊັ້ນກຳມະ ກອນລວມກັບມວນຊົນຊາວໄຮ່ນານັບເປັນລ້ານໆຄົນ, ພວກປະຊາທິປະໄຕ ຊົນ ຊັ້ນນາຍທຶນ ແລະ ຊັ້ນຄົນຕ່າງໆ ໄດ້ພ້ອມກັນກ້າວຂຶ້ນເປັນກຳລັງນຳໜ້າຢູ່ໃນ ຂະບວນການປົດປ່ອຍຊາດ ຕາມລະບອບຈັກກະພັດນິຍົມ.

ພາຍຫລັງສົງຄາມໂລກຄັ້ງທີສອງ ປະຊາຊາດຂອງບັນດາປະເທດ ຫົວ ເມືອງຂຶ້ນ ແລະ ອະນານິຄົມຕ່າງໆ ກໍໄດ້ຮັບການປົດປ່ອຍອອກຈາກລະບົບລ່າ

---

๑) ວ.ອິ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມ ๔๕, ໜ້າ ๔๐ນ.

ຫົວເມືອງຂຶ້ນ ແລະ ກ້າວເຂົ້າສູ່ເສັ້ນທາງຂະຫຍາຍຕົວຢ່າງເປັນອິດສະຫລະ. ການພັງທະລາຍຂອງ ລະບົບລ່າຫົວເມືອງຂຶ້ນ ແຫ່ງລະບອບຈັກກະພັດນິຍົມໄດ້ເລີ່ມເກີດຂຶ້ນ. ໃນປີ ຈພຈພ ອັດຕາສ່ວນປະຊາກອນຂອງບັນດາຫົວເມືອງຂຶ້ນ ແລະ ອະນານິຄົມຕ່າງໆຕົກເປັນ ຜັພ,ຄ% ຈາກຈຳນວນປະຊາກອນໂລກ ທັງຫມົດ ແຕ່ໃນປີ ຈພຜຊ0-ມີພຽງ 0,ສ% ເທົ່ານັ້ນ. ຈຳນວນລັດຕ່າງໆທີ່ໄດ້ຮັບການປົດປ່ອຍກໍເພີ່ມຂຶ້ນຫລາຍກວ່າ ຈ00.

<u>ໃນທັດສະນະຂອງປະຫວັດສາດແລ້ວ ການພັງທະລາຍຂອງລະບົບລ່າ ຫົວເມືອງຂຶ້ນ</u> ທີ່ເກີດຈາກການຕໍ່ສູ້ຂອງຂະບວນປົດປ່ອຍຊາດແມ່ນ <u>ເຫດການ ອັນດັບສອງທີ່ເກີດຂຶ້ນພາຍຫລັງການສ້າງຕັ້ງລະບົບສັງຄົມນິຍົມແຫ່ງໂລກ.</u>

ເຖິງແມ່ນວ່າລັດທິລ່າຫົວເມືອງຂຶ້ນ ຈະປະສົບກັບການລົ້ມລະລາຍ ຍ້ອນຜົນການບຸກໂຈມຕີຢ່າງແຂງແຮງຂອງຂະບວນການປົດປ່ອຍຊາດກໍຕາມ ແຕ່ລະບອບຈັກກະພັດນິຍົມ ກໍໄດ້ປັບຕົວເຂົ້າສູ່ເງື່ອນໄຂແບບໃຫມ່ ເພື່ອປົກປ້ອງແລະຍຶດຫມັ້ນທີ່ຕັ້ງຂອງຕົນໄວ້. ນັ້ນຄືລັດທິລ່າຫົວເມືອງຂຶ້ນແບບໃຫມ່.

<u>ລັດທິລ່າຫົວເມືອງຂຶ້ນແບບໃຫມ່</u> ແມ່ນລະບົບການຄົບຊຸດ ແຫ່ງການພົວພັນທາງດ້ານເສດຖະກິດ, ການເມືອງ, ການທະຫານ ແລະ ດ້ານອື່ນໆເພື່ອທຳການກົດຂີ່ຂູດຮີດບັນດາປະເທດເອກະລາດທີ່ຫນຸ່ມນ້ອຍທັງຫລາຍ ດ້ວຍວິທີການສວຍໃຊ້ຄວາມຫລ້າຫລັງ ທາງດ້ານເສດຖະກິດ ແລະ ຄວາມບໍ່ສະເຫມີພາບ-ຂອງປະເທດເຫລົ່ານີ້ ຢູ່ໃນເສດຖະກິດໂລກທຶນນິຍົມ.

ລະບອບຈັກກະພັດນິຍົມ ໄດ້ໃຫ້ການສະຫນັບສະຫນູນຢ່າງແຂງແຮງແກ່ຖັນແຖວປະຕິການ ຂອງບັນດາປະເທດທີ່ໄດ້ຮັບການປົດປ່ອຍໃຫມ່, ສະກັດກັ້ນ - ຖ່ວງດຶງການລົບລ້າງຄວາມຫລ້າຫລັງ ທາງດ້ານສັງຄົມ ແລະ ສ້າງ ຄວາມຫຍຸ້ງຍາກແກ່ການຂະຫຍາຍຕົວຕາມເສັ້ນທາງທີ່ບໍ່ແມ່ນແບບທຶນນິຍົມ ທີ່ຈະ-ນຳໄປສູ່ສັງຄົມນິຍົມ. ພວກຈັກກະພັດໄດ້ຜູກມັດປະເທດເຫລົ່ານີ້ ດ້ວຍການສັນຍາທາງດ້ານເສດຖະກິດ ແລະ ສົນທິສັນຍາການເມືອງ-ການທະຫານຊຶ່ງຫນີບເຕັງອະນາທິປະໄຕຂອງພວກເຂົາເຈົ້າ.

ເສົາຄ້ຳອັນສຳຄັນຂອງລະບອບຈັກກະພັດນິຍົມ ສະໄຫມປະຈຸບັນແມ່ນ ສະຫະລັດອາເມລິກາ. ພາຍໃຕ້ການນຳພາຂອງສະຫະລັດອາເມລິກາ ພວກ ຈັກກະພັດໄດ້ພາກັນອອກແຮງຢ່າງຕັ້ງຫນ້ານຳໃຊ້ທຸກວິທີການ ແລະ ຮູບການແບບ

ใหม่ເພື່ອຮັກສາການກົດຂີ່ຂູດຮີດ ປະຊາກອນຂອງບັນດາປະເທດອະດີດ ຫົວເມືອງຂຶ້ນ ແລະ ອະນານິຄົມຕ່າງໆ. ຢູ່ຕາມບັນດາປະເທດເຂດທະວີບອາເມລິກາລາຕິນ, ອາຊີ, ອາຟະລິກາ ພວກນາຍທຶນຜູກຂາດກໍພະຍາຍາມ ກຳແຫນ້ນໄມ້ງັດເສດຖະກິດ ແລະ ອິດທິພົນທາງດ້ານການເມືອງໄວ້ໃນກຳມືຂອງຕົນ. ການອອກແຮງພະຍາຍາມດັ່ງກ່າວໄດ້ແນໃສ່ປົກປັກຮັກສາ ແລະ ຮັດແຫນ້ນບົດບາດຢູ່ໃນເສດຖະກິດຂອງບັນດາປະເທດທີ່ໄດ້ຮັບການປົດປ່ອຍໃຫມ່, ດຶງຈ່ອງເອົາພວກເຂົາເຈົ້າເຂົ້າສູ່ກຸ່ມທະຫານ, ຈັດຕັ້ງລະບອບຜະເດັດການ-ຂຸນເສິກ, ສ້າງຕັ້ງຖານທັບຕ່າງໆຂຶ້ນຢ່າງຫລວງຫລາຍຢູ່ຕາມດິນແດນຂອງປະເທດເຫລົ່ານີ້.

ການຊ່ວຍເຫລືອຖານ້ອ້ຍນ້ອງ ຈາກບັນດາປະເທດສັງຄົມນິຍົມຕ່າງໆໄດ້ສ້າງເງື່ອນໄຂສະດວກແກ່ບັນດາປະເທດຫນຸ່ມນ້ອຍທັງຫລາຍ ໃນການດຳເນີນການຕໍ່ສູ້ເພື່ອຄວາມເປັນເອກະລາດທາງດ້ານເສດຖະກິດ ແລະ ຄວາມ ກ້າວຫນ້າທາງສັງຄົມ ແລະ ການຊ່ວຍເຫລືອດັ່ງກ່າວ ໄດ້ຂັດກັບລັດທິລ່າຫົວເມືອງຂຶ້ນແບບໃຫມ່ ທີ່ເປັນຕົວອັນຕະລາຍ ແກ່ການຂະຫຍາຍຕົວຢ່າງເປັນເອກະ - ລາດຂອງບັນດາປະເທດທີ່ຫນຸ່ມນ້ອຍເຫລົ່ານີ້.

ຄວາມເປັນເອກະລາດທາງດ້ານ ການເມືອງ-ຄືຈຸດເລີ່ມຕົ້ນແຫ່ງການ ຂະຫຍາຍຕົວ ເສດຖະກິດ

ຈຸດເລີ່ມຕົ້ນ ແຫ່ງການຂະ-ຫຍາຍຕົວຂອງບັນດາປະເທດ ທີ່ໄດ້ຮັບການປົດປ່ອຍ ໃຫມ່ ແມ່ນການຍາດເອົາ ຄວາມ-ເປັນເອກະລາດໄດ້ທາງດ້ານການເມືອງ ຂອງບັນດາປະເທດຫົວເມືອງຂຶ້ນ , ອະນານິຄົມ ແລະ ປະເທດທີ່ມີການຂະຫຍາຍຕົວຫລ້າຫລັງ. ການຍາດ ເອົາ ຄວາມເປັນເອກະລາດໄດ້ນີ້ ເກີດຂຶ້ນດ້ວຍລັກສະນະ ແລະ ຮູບການທີ່ ແຕກຕ່າງກັນ. ປະເທດຈຳນວນຫນຶ່ງ ກໍຍາດເອົາຄວາມເປັນເອກະລາດໄດ້ ໂດຍການຕໍ່ສູ້ກັນດ້ວຍກຳລັງອາວຸດຢ່າງຮຸນແຮງຕ້ານກັບພວກນັກລ່າຫົວເມືອງຂຶ້ນ , ອີກຈຳນວນຫນຶ່ງຍາດເອົາຄວາມເປັນເອກະລາດໄດ້ ໂດຍທຳການຕໍ່ສູ້ ທາງດ້ານການເມືອງຢ່າງແຂງແຮງ ແລະ ໃຊ້ເວລາດົນນານຕ້ານກັບພວກ ກຳອຳນາດ. ເຖິງຢ່າງໃດກໍດີ ຢູ່ໃນທຸກໆກໍລະນີ ຄວາມເປັນເອກະລາດທາງ ດ້ານ

ການເມືອງ ແມ່ນເປັນໝາກຜົນແຫ່ງການຕໍ່ສູ້ຊາດນັ້ນເອງ.

ການສ້າງຕັ້ງລັດອະທິປະໄຕທີ່ເກີດມາຈາກການຕໍ່ສູ້ ເພື່ອຄວາມເປັນ ເອ
ກະລາດທາງດ້ານການເມືອງນັ້ນ ໄດ້ຮັດໃຫ້ອຳນາດທາງການເມືອງ ຂອງ
ພວກນະຄາອຳນາດຕ່າງດ້າວ ຄືພວກເຈົ້າປົກຄອງຫົວເມືອງຂຶ້ນ ໄດ້ສູນສິ້ນລົງ
ຢູ່ໃນໂຄງການການເມືອງຂອງ ພ.ກ.ສ.ຊ ໄດ້ບົ່ງໄວ້ວ່າ ຄວາມເປັນເອກະ
ລາດທາງດ້ານການເມືອງ "ຈະບໍ່ໝັ້ນຄົງ ແລະ ກາຍເປັນສິ່ງເຝື້ຝັນໄປ ຖ້າ
ວ່າການປະຕິວັດບໍ່ນຳເອົາການຫັນປ່ຽນຢ່າງເລິກເຊິ່ງຢູ່ໃນຊີວິດສັງຄົມ ແລະ
ເສດຖະກິດ, ບໍ່ແກ້ໄຂບັນຫາຕົວຈິງແຫ່ງການຟື້ນຟູຊາດ" ๑).

ອີງຕາມລະດັບການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ສັງຄົມ ບັນ
ດາປະເທດກຳລັງພັດທະນາກໍມີບັນແຕກຕ່າງກັນຢ່າງຫລວງຫລາຍ. ຈຳນວນ
ໜຶ່ງ (ອິນເດຍ, ບຣາຊິນ, ເມັກຊິກໂກ, ປາກິສະຖານ ແລະ ອື່ນໆ) ມີ
ອຸດສາຫະກຳຂະຫຍາຍຕົວແລະມີຊາວກຳມາຊີບຢ່າງຫລວງຫລາຍ, ສ່ວນຢູ່ໃນ
ປະເທດອື່ນໆ (ບັນດາປະເທດອາຟະລິກາ ເຂດຮອນ) ອຸດສາຫະກຳຫາ ກໍ
ເລີ່ມມີຂັ້ນພຽງເລັກນ້ອຍ ແລະ ປະຊາຊົນ ๗๐-๙๐% ໄດ້ດຳລົງຊີວິດຢູ່ໂດຍ-
ອາໄສການກະສິກຳທີ່ລ້າຫລັງ ແລະ ມີລັກສະນະທຳມະຊາດກະແຈກກະ-
ຈາຍ. ບັນດາປະເທດກຳລັງພັດທະນາກໍຍັງມີບັນແຕກຕ່າງກັນ ທາງດ້ານເຂດ
ແດນ, ຈຳນວນປະຊາກອນ ແລະ ເງື່ອນໄຂດ້ານຝ່າອາກາດອີກ.

ເຖິງແນ່ນອນ ບັນດາປະເທດທີ່ໄດ້ຮັບການປົດປ່ອຍເຫລົ່ານີ້ຈະມີຄວາມ -
ແຕກຕ່າງກັນໃນດ້ານຕ່າງໆກໍຕາມ ແຕ່ກໍຍັງມີຈຸດລວມຈຳນວນໜຶ່ງເຊັ່ນ: ເສດ
ຖະກິດຫລ້າຫລັງ, ຕະຫລາດພາຍໃນ ບໍ່ທັນຂະຫຍາຍຕົວ, ມີລັກສະນະຂຶ້ນກັບ
ການຂາເຂົ້າ ທາງດ້ານອຸປະກອນການຜະລິດ, ວັດຖຸດິບ, ສະບຽງອາຫານ,
ບໍລິມາດ ການຂາສູ່ງ. ສິ່ງດ່ັງກ່າວ ໄດ້ຮັດໃຫ້ປະເທດເຫລົ່ານີ້ຕົກຢູ່ໃນສະ
ພາບບໍ່ສະເໝີພາບກັນ ຢູ່ໃນຕະຫລາດໂລກ. ຢູ່ໃນເສດຖະກິດຂອງ ບັນດາ
ປະເທດທີ່ໄດ້ຮັບການປົດປ່ອຍໃໝ່ນີ້ ເງິນທຶນຜູກຂາດຕ່າງດ້າວໄດ້ມີ ອັດຕາ
ສ່ວນຫລາຍທີ່ສຸດ ຊຶ່ງສະໜັບສະໜູນອຸດໜູນພວກນຸ່ມນາຍທຶນແຫ່ງຊາດ ພວກຫົວ
ນິຍົມຣິດເດີ່ມ ແຫ່ງຊາດ ແລະ ທຶນຜູກຂາດຕ່າງດ້າວ ໄດ້ກາຍເປັນສິ່ງກີດ

---

๑) ໂຄງການແຫ່ງ ພ.ກ.ສ.ຊ.ມົດສະກູ,ສຳນັກພິມ"ໂປລິດອິດຊະດາດ",
ປີ ๑๙๖๔, ໜ້າ ๔๒.

ຂວາງການດັດສ້າງເສດຖະກິດສັງຄົມ ໂດຍພື້ນຖານ. ເງິນທຶນຕ່າງດ້າວ ຍັງ ໄດ້ສັະຫນັບສະຫນູນອູ້ມຊູພວກປະຕິການ, ລະບອບຕ້ານປະຊາທິປະໄຕ ຢູ່ໃນ-ປະເທດຕ່າງໆ, ເກີດມີການສໍ້ລາດບັງຫລວງຂຶ້ນ ແລະ ນາໍໄປສູ່ການ ປະທະ ກັນພາຍໃນຊາດກໍຄືລະຫວ່າງປະເທດ (ລະຫວ່າງລັດ)ຂຶ້ນອີກ.

ໂດຍທີ່ວໄປແລ້ວ ປະຊາກອນຂອງບັນດາປະເທດທີ່ໄດ້ຮັບການປົດປ່ອຍ - ໃຫມ່ນັ້ນ ແມ່ນກີກຫນັງສື, ເຊື່ອຖືສາສະຫນາຜີສາງຢ່າງງົມງວາຍ, ແນວຄິດ ບາດຫມາງລະຫວ່າງຊົນຊາດ, ຂາດເຂີນທາງດ້ານການແພດ, ວັດທະນະທາໍ ຕາໍ່, ຢູ່ໃນຫລາຍໆປະເທດຍັງມີ ໂຄງປະກອບຊົນຊັ້ນສັງຄົມຫລ້າຫລັງ, ລະດັບ ການເປັນຢູ່ຂອງປະຊາຊົນຕາໍ່, ກິນບໍ່ອີ່ມເຕັມ, ພະຍາດລະບາດທີ່ເປັນ ເຫດ ໃຫ້ຄົນລົ້ມຕາຍລົງນັບເປັນລ້ານໆ. ທັງຫມົດນີ້ແມ່ນຜົນສະທ້ອນຈາກລະບອບລ່າ ຫົວເມືອງຂຶ້ນ.

ສະຫລຸບໄດ້ວ່າ ຄວາມເປັນເອກະລາດທາງດ້ານການເມືອງ ຂອງບັນດາ ປະເທດທີ່ໄດ້ຮັບການປົດປ່ອຍໃຫມ່ ຍັງບໍ່ທັນພຽງພໍ ທີ່ຈະຍົກລະດັບການຂະ-ຫຍາຍຕົວທາງດ້ານເສດຖະກິດຂຶ້ນໄດ້ເທື່ອ. ແຕ່ວ່ານັນໄດ້ສ້າງເງື່ອນໄຂແກ່-ການຮັດແຫນ້ນທຸກກາໍລັງແຮງຂອງສັງຄົມ ແລະ ການປຸກລະດົມຕໍ່ສູ້ເພື່ອ ການ ຜັນຂະຫຍາຍເສດຖະກິດ ແລະ ເພື່ອຄວາມເປັນເຈົ້າການທາງດ້ານເສດຖະ ກິດ.

ພາກສ່ວນເສດຖະກິດ-ສັງຄົມ ຢູ່ໃນບັນດາປະເທດທີ່ໄດ້ ຮັບ ການປົດປ່ອຍໃຫມ່

ຢູ່ໃນເສດຖະກິດຂອງປະເທດທີ່ໄດ້ ຮັບ ການປົດປ່ອຍໃຫມ່ນັ້ນ ແມ່ນຍັງມີ ພາກ ສ່ວນເສດຖະກິດ-ສັງຄົມຕ່າງໆ. ເກືອບ ວ່າຢູ່ທີ່ວໄປຍັງຄົງຮັກສາພາກສ່ວນແບບ ເກົ່າແກ່ໄວ້ຄື<u>ພາກສ່ວນກຸ່ມຊົນ.</u> ຢູ່ໃນຫລາຍໆປະເທດ ໂດຍສະເພາະຢ່າງຍິ່ງ ແມ່ນຢູ່ທະວີບອາຟະລິກາ ພາກສ່ວນກຸ່ມຊົນ ແມ່ນພາກສ່ວນແບບເຈົ້າກົກ ເຈົ້າ ເຫລົ່າ. ພາກສ່ວນດັ່ງກ່າວນີ້ນອນຢູ່ບົນພື້ນຖານກາໍມະສິດກຸ່ມຊົນ ແລະການກະ ສິກາໍທາໍມະຊາດ; ເກືອບຖືວ່າບໍ່ມີການພົວພັນເສດຖະກິດທີ່ມີລັກສະນະ ກ້າວ ຫນ້າເລີຍ. ການພົວພັນທາງດ້ານສິນຄ້າ-ເງິນຕາ ໄດ້ເຮັດໃຫ້ພາກສ່ວນແລະ ສັງຄົມດັ່ງກ່າວລົ້ມລະລາຍລົງ. ຈາກນັ້ນມັນກໍໄດ້ກ້າວໄປສູ່ <u>ພາກສ່ວນສິນຄ້າ-</u>

ຂະໜາດນ້ອຍ ທີ່ເປັນພື້ນຜະລິດຂອງຊາວໄຮ່ນາ ແລະ ນາຍຊ່າງຫັດຖະກຳ ຊຶ່ງນອນຢູ່ບົນພື້ນຖານກຳມະສິດສ່ວນຕົວກ່ຽວກັບພາຫະນະການຜະລິດແລະແຮງງານສ່ວນຕົວ, ຫລໍ່ຫລໍ້ກ້າວຂຶ້ນສູ່ ພາກສ່ວນສັກດິນາ ແລະ ເຄື່ອງສັກດິນາ ຊຶ່ງນອນຢູ່ບົນພື້ນຖານກຳມະສິດສັກດິນາ (ກອນອົນຫມົດ ແມ່ນກຳມະສິດຕໍ່ທີ່ດິນ) ແລະ ບົນພື້ນຖານຮູບການເບ້ຍທີ່ດິນກ້ອນສະໄໝທຶນນິຍົມເຊັ່ນ ອອກແຮງງານເພື່ອຫົດແທນຄ່າເຊົ່າ, ຈ່າຍຄ່າເຊົ່າດ້ວຍພືນຜະລິດທຳມະຊາດ ແລະ ເງິນຕາ.

ພາກສ່ວນເສດຖະກິດສັງຄົມທັງຫມົດນີ້ ບໍ່ໄດ້ເປັນກົນໄກລວມສຳລັບ ການຜະລິດສຳຂອງສັງຄົມ ແຕ່ຢ່າງໃດເລີຍ ມັນກັບຖ້ວງດຶງຄວາມກ້າວໜ້າ ທາງດ້ານເສດຖະກິດ ແລະ ສັງຄົມ, ສ້າງຄວາມຫຍຸ້ງຍາກໃນການລຸມລອງ ບັນຊາເສດຖະກິດ, ສ້າງຄວາມສັບສົນໃຫ້ແກ່ໂຄງປະກອບຊຶ້ນຊັ້ນ ແລະ ສະກັດ-ກັ້ນການເຕີບໃຫຍ່ຂອງຊຶ້ນຊັ້ນທີ່ກ້າວໜ້າທັນສະໄໝ.

ຢູ່ໃນຫລາຍໆປະເທດທີ່ໄດ້ຮັບການປົດປ່ອຍໃໝ່ນັ້ນ ໄດ້ເກີດມີ ພາກສ່ວນເສດຖະກິດທຶນນິຍົມຂຶ້ນ. ການພົວພັນແຫ່ງການຜະລິດທຶນນິຍົມ ກໍໄດ້ຮັບ ການຂະຫຍາຍຕົວ ແລະ ແຜ່ລາມອອກຢ່າງກ້ວາງຂວາງ, ຕົວຢ່າງ, ຢູ່ປະເທດ-ອິນເດຍ ແລະ ເມັກຊິກໂກ. ທຶນຕ່າງດ້າວມີຈຸດປະສົງຢາກພັນຂະຫຍາຍ ຮູບການເສດຖະກິດທຶນນິຍົມ ແລະ ຮັກສາບັນດາພາກສ່ວນເສດຖະກິດ-ສັງຄົມທີ່ຫລ້າຫລັງເຫລົ່ານັ້ນໄວ້ ເພື່ອເງິນທຶນຕ່າງດ້າວຈະສາມາດທຳການກົດຂີ່ຂູດຮີດໄດ້ຕໍ່ໄປ.

ບົດບາດອັນສຳຄັນຢູ່ໃນບັນດາປະເທດທີ່ໄດ້ຮັບການປົດປ່ອຍໃໝ່ ສ່ວນຫລວງຫລາຍນັ້ນ ແມ່ນຂອງພາກສ່ວນແຫ່ງລັດ. ພາກສ່ວນແຫ່ງລັດ ແມ່ນພາກສ່ວນຈຳເພາະ ທາງດ້ານເສດຖະກິດ-ສັງຄົມ ຊຶ່ງນອນຢູ່ບົນພື້ນຖານກຳມະສິດແຫ່ງລັດ ກ່ຽວກັບພາຫະນະການຜະລິດ. ພາກສ່ວນແຫ່ງລັດ ຢູ່ໃນເສດຖະກິດຂອງປະເທດທີ່ໄດ້ຮັບການປົດປ່ອຍໃໝ່ນັ້ນ ມີທ່າອ່ຽງຂະຫຍາຍຕົວແຕກຕ່າງ-ກັນເຊັ່ນ: ຢູ່ພາຍໃນປະເທດທີ່ກ້າວເດີນໄປຕາມເສັ້ນທາງທຶນນິຍົມ, ພາກສ່ວນດັ່ງກ່າວໄດ້ມີລັກສະນະເປັນລະບົບທຶນນິຍົມແຫ່ງລັດຢ່າງຈະແຈ້ງ,ສ່ວນຢູ່ພາຍໃນປະເທດທີ່ມີທ່າອ່ຽງສັງຄົມນິຍົມ ມີລັກສະນະເປັນສ່ວນໃນເສດຖະກິດ-ສັງຄົມອັນໃໝ່ ແລະ ມີທ່າອ່ຽງຕ້ານລະບອບທຶນນິຍົມ.

ເສດຖະກິດທຶນນິຍົມຫລາຍໆພາກສ່ວນ ຢູ່ໃນບັນດາປະເທດທີ່ໄດ້ຮັບການ ປົດປ່ອຍໃໝ່ນີ້ ໄດ້ເຮັດໃຫ້ໂຄງປະກອບສັງຄົມມີຄວາມສັບສົນປົນເປທີ່ສຸດ. ຢູ່ໃນປະເທດເຫລົ່ານີ້ ຍັງມີຊັ້ນຄົນຈຳນວນໜຶ່ງອີກ ທີ່ສູນຫາຍໄປແລ້ວຢູ່ໃນປະເທດທຶນນິຍົມຂະຫຍາຍຕົວ. ພວກນາຍທຶນ ແລະ ຊາວກຳມາຊີບກໍມີອັນແຕກຕ່າງ-ກັນຈາກຊົນຊັ້ນນາຍທຶນ ແລະ ກຳມາຊີບ ທີ່ມີຢູ່ໃນບັນດາປະເທດທຶນນິຍົມ ຂະຫຍາຍຕົວ.

ໜ້າທີ່ອັນສຳຄັນຂອງບັນດາປະເທດທີ່ໄດ້ຮັບ ຄວາມເປັນເອກະລາດທາງ ດ້ານການເມືອງ ແມ່ນຕ້ອງໄດ້ຂ້າມຜ່ານລັກສະນະຫລາຍພາກສ່ວນ ທີ່ມີຢູ່ ໃນ ເສດຖະກິດ ຊຶ່ງໝາຍຄວາມວ່າ ຕ້ອງກຳນົດເສັ້ນທາງຂະຫຍາຍຕົວຂອງຕົນ.

ສອງເສັ້ນທາງແຫ່ງການຂະຫຍາຍຕົວ ຂອງບັນດາປະເທດທີ່ໄດ້ຮັບ ການ ປົດປ່ອຍ

ພາຍຫລັງຍາດເອົາການເປັນ-ເຈົ້າຕົນເອງໄດ້ ທາງ ດ້ານ ການເມືອງມາແລ້ວ ຕໍ່ໜ້າປະ ຊາຊົນຂອງບັນດາປະເທດ ທີ່ ໄດ້ຮັບການປົດປ່ອຍໃໝ່ ໄດ້ເກີດມີສອງເສັ້ນທາງແຫ່ງການຂະຫຍາຍຕົວ ຄື ເສັ້ນທາງທຶນນິຍົມ ແລະ ເສັ້ນທາງທີ່ບໍ່ແມ່ນທຶນນິຍົມ ເສັ້ນທາງທີ່ຈະນຳໄປສູ່-ລະບອບສັງຄົມນິຍົມໃນຂັ້ນສຸດທ້າຍ. ການກຳນົດເສັ້ນທາງຂະຫຍາຍຕົວ ແມ່ນ ບັນຫາອັນຕັດສິນທີ່ສຳຄັນ ທີ່ສຸດຊຶ່ງຢືນຢູ່ຕໍ່ໜ້າປະຊາຊົນຂອງປະເທດເຫລົ່ານີ້.

ລະບອບທຶນນິຍົມໃຫຍ່ແດ ແກປະຊາຊົນ ?

ລະບອບທຶນນິຍົມ ບໍ່ສາມາດຮັບປະກັນຄວາມກ້າວໜ້າໄດ້ ຢ່າງວ່ອງໄວ ທາງດ້ານເສດຖະກິດ, ບໍ່ສາມາດລົບລ້າງຄວາມທຸກຍາກຫລ້າຫລັງແລະຄວາມ ທຸກທໍລະມານຂອງປະຊາຊົນ. ການຂະຫຍາຍຕົວ ຂອງທຶນນິຍົມ ຢູ່ຊົນນະບົດ ແມ່ນເສັ້ນທາງແຫ່ງການແບ່ງແຍກຊົນນະບົດໃນເມື່ອວ່າຊາວໄຮ່ນາສ່ວນໜ້ອຍ ໄດ້ທຳການກົດຂີ່ຂູດຮີດຊາວໄຮ່ນາສ່ວນໃຫຍ່, ຊາວໄຮ່ນາຕິດແໜ້ນກັບຜູ້ຮັ່ງມີ ຍ້ອນຄ້າງໜີ້ສິນ, ທຳລາຍຊາວຜູ້ອອກແຮງງານໄຮ່ນາດ້ວຍກັນ. ຊາວໄຮ່ນາ ຕ້ອງໄດ້ເຮັດວຽກອອກແຮງງານໃຫ້ພວກນາຍທຶນ, ຊີວິດການເປັນຢູ່ ບໍ່ຮັບປະ ກັນ ແລະ ເກີດມີໄພທ້ວງງານຂຶ້ນ. ພວກນາຍທຶນນ້ອຍກໍຈະເຂົ້າທຳການຕໍ່ສູ້ ຊ່ວງເສັ້ງກັບ ທຶນໃຫຍ່. ປະຊາຊົນຈຳນວນຫລວງຫລາຍບໍ່ໄດ້ຮັບການ

ສຶກສາ ແລະ ບໍ່ມີລະດັບວັດທະນະທຳໃດໆເລີຍ. ພວກປັນຍາຊົນກໍຈຳຕ້ອງໄດ້ຂາຍຄວາມຮູ້ຄວາມສາມາດຂອງຕົນໃຫ້ແກ່ພວກທີ່ຮັ່ງມີ.

ລະບອບສັງຄົມນິຍົມ ໃຫ້ຫຍັງແດ່ແກ່ປະຊາຊົນ ?

ລະບອບສັງຄົມນິຍົມ ແມ່ນເສັ້ນທາງນຳພາປະຊາຊົນໄປສູ່ຄວາມເປັນ ອິດສະຫລະພາບ ແລະ ຄວາມຜາສຸກ. ມັນຮັບປະກັນການດັດສ້າງຟື້ນຟູເສດຖະ-ກິດ ແລະ ວັດທະນະທຳຂຶ້ນໄດ້ຢ່າງວ່ອງໄວ. ໃນຊົ່ວຊີວິດຄົນຮຸ່ນຫນຶ່ງ ບັນດາປະເທດທີ່ຫລ້າຫລັງໃນເມື່ອກ່ອນ ໄດ້ກາຍເປັນປະເທດທີ່ມີການຂະຫຍາຍຕົວ-ສູງຢູ່ໃນຂົງເຂດເສດຖະກິດ ແລະ ວັດທະນະທຳ. ການລົບລ້າງການກົດຂີ່ຂູດຮີດຄົນຕໍ່ຄົນໄດ້ເຮັດໃຫ້ ຄວາມບໍ່ສະເຫມີພາບທາງສັງຄົມຈົບສິ້ນລົງ.ໄພຫວ່າງງານບໍ່ຄ້າງເຫລືອໂດຍສິ້ນເຊີງ. ລະບອບສັງຄົມນິຍົມ ຮັບປະກັນທີ່ດິນໃຫ້ ແກ່ຊາວໄຮ່ນາຫມົດທຸກຄົນ ແລະ ຊ່ວຍເຫລືອພວກເຂົາເຈົ້າຜັນຂະຫຍາຍການກະສິກຳ, ເຕົ້າໂຮມພວກເຂົາເຈົ້າເຂົ້າເປັນສະຫະກອນລວມຫມູ່ ດ້ວຍຄວາມສະຫມັກໃຈ, ສະຫນອງເຄື່ອງກົນຈັກກະສິກຳທີ່ສຳຄັນ ແລະ ນຳໃຊ້ວິທະຍາສາດທາງດ້ານກະເສດ ເພື່ອການກະສິກຳຂອງພວກເຂົາເຈົ້າ. ລະບອບສັງຄົມນິຍົມຮັບປະກັນລະດັບຊີວິດການເປັນຢູ່ຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານທັງຫມົດ ທາງດ້ານວັດທະນະທຳ ກໍຄືທາງດ້ານວັດຖຢ່າງທົ່ວເຖິງ - ແລະ ສູງສົ່ງທີ່ສຸດ.

ຈະເດີນຕາມເສັ້ນທາງໃດນັ້ນ ແມ່ນປະຊາຊົນເອງຈະເປັນຜູ້ຕັດສິນ. ໃນປະຈຸບັນ ອີງຕາມການຊັ່ງຊາກຳລັງແຮງຢູ່ໃນເວທີສາກົນ ແລະ ການສະຫນັບສະຫນູນຢ່າງແຂງແຮງ ຂອງລະບົບສັງຄົມນິຍົມແຫ່ງໂລກ ປະຊາກອນຂອງບັນດາປະເທດທີ່ໄດ້ຮັບການປົດປ່ອຍໃຫມ່ ມີຄວາມອາດສາມາດຕັດສິນບັນຫາ ດັ່ງກ່າວໄດ້ ເພື່ອສິດຜົນປະໂຫຍດຂອງຕົນ. ການເລືອກເຟັ້ນເສັ້ນທາງເດີນຂອງພວກເຂົາເຈົ້າ ແມ່ນຂຶ້ນກັບການຊັ່ງຊາກຳລັງແຮງຂອງຊົນຊັ້ນ. ຊົນຊັ້ນ ກຳມະກອນເປັນຜູ້ນຳພາການຕໍ່ສູ້ຂອງຂະບວນມະຫາຊົນ ແລະ ປະຊາທິປະໄຕທັງຫມົດ ເພື່ອເສັ້ນທາງຂະຫຍາຍຕົວທີ່ບໍ່ແມ່ນທຶນນິຍົມ ແລະ ເພື່ອຮັບປະກັນ ສິດຜົນປະໂຫຍດໃຫ້ແກ່ຊົນຊາດສ່ວນໃຫຍ່.

ການຂະຫຍາຍຕົວຂອງບັນດາປະເທດທີ່ໄດ້ຮັບການປົດປ່ອຍໃຫມ່ ມີລັກສະນະແຕກຕ່າງກັນ. ພາຍຫລັງສຳເລັດການປົດປ່ອຍຊາດແລ້ວ ຈຳນວນຫນຶ່ງ ກໍ

ດຶ່ນຕາມເສັ້ນທາງຂະຫຍາຍຕົວແບບປະຕິວັດ ປະຊາທິປະໄຕ. ສ່ວນອີກ ຈຳ ນວນໜຶ່ງ ກໍສ້າງການພົວພັນແບບທຶນນິຍົມ. ພວກໜຶ່ງອີກ ກໍດຳເນີນ ການ ເມືອງແບບເປັນເອກະລາດ, ສ່ວນພວກອື່ນພັດດຶ່ນຕາມແນວທາງການເມືອງ ຂອງລະບອບຈັກກະພັດນິຍົມ.

ຫລາຍໆປະເທດໄດ້ເລືອກເສັ້ນທາງດຶ່ນທີ່ຫ່າງໄກ່ສັງຄົມນິຍົມ. ເງື່ອນ ໄຂການຂະຫຍາຍຕົວຂອງພວກເຂົາເຈົ້າ ກໍມີອັນແຕກຕ່າງກັນ ແຕ່ມີທິດ ທາງ ຕົ້ນຕໍອັນດຽວກັນ ໃນການຂະຫຍາຍຕົວຂອງລັດ ທ່າອຽງສັງຄົມນິຍົມຢຶ່ງ ປະ ກອບມີດັ່ງຕໍ່ໄປນີ້:

- ທີ່ຕັ້ງຂອງພວກຜູກຂາດຈັກກະພັດ, ນາຍທຶນ ແລະ ສັກດິນາໃຫ້ຖືກ-ໄດ້ຖືກລົບລ້າງໄປເທື່ອລະກ້າວ, ຈຳກັດການເຄື່ອນໄຫວທຸລະກິດຂອງ ທຶນຕ່າງດ້າວ;
- ຮັບປະກັນການຊຸມນຳຂອງລັດ ໃນເສດຖະກິດ ແລະ ກ້າວຂຶ້ນສູ່ການພັນ ຂະຫຍາຍກຳລັງການຜະລິດຢ່າງມີແຜນການ, ຄຸກຢູ່ຂະບວນ ສະຫະ ກອນຢູ່ຊຸມນະບົດ;
- ຍົກບົດບາດຂະບວນຊາວຜູ້ອອກແຮງງານຢູ່ໃນຊີວິດສັງຄົມ ໃຫ້ສູງຂຶ້ນ; ກ້າວຂຶ້ນຮັບປະກັນພະນັກງານວິຊາສະເພາະພາຍໃນຊາດໃຫ້ແກ່ກົງຈັກ ເພື່ອຮັບໃຊ້ປະຊາຊົນ;
- ການເມືອງຕ່າງປະເທດ ມີລັກສະນະຕ້ານລະບອບຈັກກະພັດນິຍົມ .

ເສັ້ນທາງຂະຫຍາຍຕົວທີ່ບໍ່ແມ່ນທຶນນິຍົມນັ້ນ ແມ່ນຢູ່ບອນວ່າ ຂະບວນການ ຫັນປ່ຽນຫລາຍພາກສ່ວນເສດຖະກິດນັ້ນ ຕ້ອງແນໃສ່ສ້າງເງື່ອນໄຂເທື່ອລະ - ກ້າວ ເພື່ອກ້າວຂຶ້ນສ້າງສັງຄົມນິຍົມ.

ການດັດສ້າງເສດຖະກິດ-ສັງຄົມຢູ່ໃນບັນ ດາປະເທດທີ່ໄດ້ຮັບການ ປົດປ່ອຍໃໝ່	ການຜັນຂະຫຍາຍຊຸດສາທະ ກຳຂອງລັດ ແລະ ການຈຳ ກັດ ທຶນຂະໜາດ ໃຫຍ

ການວາງມາດຕະການຄວບຄຸມການຜູກຂາດຕ່າງດ້າວ ແລະ ຫລຸດຜ່ອນ ການ ເຄື່ອນໄຫວຂອງມັນ, ການດຳເນີນການປະຕິຮູບທີ່ດິນຢ່າງເປັນຮາກຖານແລະ ກ້າວຂຶ້ນວາງແຜນການເສດຖະກິດທົ່ວໜ້ານ ກຳລັງໄດ້ຮັບການປະຕິບັດກັນ ຢູ່

ตามบันดาปะเทดที่ม็ท่าอฐวสัวคิมนิยิม.

ผาภส่อนแซ่วลัด ยู่ในเสดถะภิดออวบันดาปะเทดที่ได้ธับภาน ปิดป่อยใหม่ ได้ถึภส้าวตั้วอ้นบิ้นพื้นถานภานยึดเอิ้าภำมะสิดที่อ้นภับ อำ-นาดปิภคอวล่าซิอเมือวอ้น ซลิภานผูภอาดต่าวด้าอ มาเปันออว ลัด และ บิ้นพื้นถานภานภ์ส้าวโธวจัภโธววานใหม่. ผาภส่อนแซ่วลัดยู่ในเสดถะภิดออวปะเทดเซล่ำนี้ ยัวปะภอบด้อยทะนาคาน, โควปะภอบเบื้อวล่าว, ที่ดิน, โธวจัภโธววานอุดสาซะภำอุดคิ้น และ ปูวแต่ว, บำลิสัดภานค้าต่าวปะเทด และ อื่นๆ.

อัดตาส่อนออวผาภส่อนแซ่วลัด ยู่ในเสดถะภิดออวบันดาปะเทดที่ได้ธับภานปิดป่อยใหม่ มีสะผาบอ้นๆลิ้วๆจาภ ๑๐ เถิว ๗๐% และอัดตาส่อนสูวสุดแม่นยู่ในบันดาปะเทดท่าอฐวสัวคิมนิยิม.

ยู่ในผาภส่อนแซ่วลัดออวปะเทดท่าอฐวสัวคิมนิยิม มีภานซันผาซะนะภานผะลิดเปันออวสัวคิม ในละดับสูวอุ่วอำนอยคอามสะดอภให้แภ่ภานดำเนินมาดตะภานต่าวๆ เพื่อคอบคุมเสดถะภิดต้านภับผาภ ส่อนเสดถะภิดส่อนติอ, ให้แภ่ภานดำเนินอุดสาซะภำออวปะเทดย่าว ได้ธับผินดี, เพิ่มทะวีทึนสะสิมพายใน และ ธับปะภันคอามเปันเอภะ - ลาดทาวด้านเสดถะภิด ได้เปันย่าวดี. ผาภส่อนแซ่วลัด บ่ผฐวแต่ มีบิดบาดต้านละบอบจัภภะผัดนิยิมเซ่ำนั้น แต่ยัวต้านละบอบทึนนิยิม นำอิภ.

ส่อนยู่ในบันดาปะเทดที่เลือภเสั้นทาวเดินแบบทึนนิยิมนั้น ภานผันอะซยายผาภส่อนแซ่วลัดภำมีบิดบาดเพิ่มสูวอ้นเจิ่นดฐอภัน. ผาภส่อน-แซ่วลัดมีบิดบาดนำซน้ายอนอ่ามันจุ่อยจุภยูภานอะซยายติอ ออวภำลัวภานผะลิด, จุ่อยผ่านอ้ามคอามซล้าซลัวออวปะเทด และ ซลุดผ่อน-ภานอ้นภับ ทึนผูภอาดต่าวด้าอ.

สิ่วที่สำคันที่สุด ยู่ในภานดัดส้าวเสดถะภิดสัวคิม ออวบันดาปะ - เทดที่ได้ธับภานปิดป่อยใหม่นี้ แม่นภานปะติธูบที่ดิน. ยู่ในธูบภานใดภำดี ภานปะติธูบที่ดิน ได้ถึภปะติบัดภันเภือบอ่ายู่ในทุภๆปะเทดภำลัวพัดทะนา. ยู่ในบันดาปะเทดท่าอฐวสัวคิมนิยิม ได้ดำเนินภานลิบล้าวธูบ

ການທີ່ດິນ ແບບເກົ່າແກ່ ທີ່ພົວພັນເຖິງຮູບການຜະລິດກະສິກຳນ້ອຍ, ມອບ ທີ່ດິນໃຫ້ແກ່ຊາວໄຮ່ນາ, ການປະກອບເຕັກນິກທັນສະໄຫມ ເຂົ້າສູ່ການ ຜະລິດ ກະສິກຳ, ຜັນຂະຫຍາຍສະຫະກອນລວມຫມູ່ ແລະ ກະສິກຳຂອງລັດ.ມາດຕະ ການເຫລົ່ານີ້ ໄດ້ເປີດຫົນທາງໃຫ້ແກ່ການຍົກລະດັບການກະສິກຳ ແລະ ເສດ ຖະກິດໃຫ້ສູງຂຶ້ນ ແລະ ເພື່ອລົບລ້າງຄວາມທຸກຍາກຫລ້າຫລັງ ຂອງຊາວໄຮ່-ນາຜູ້ອອກແຮງງານ.

ຢູ່ໃນບັນດາປະເທດເຫລົ່ານີ້ ການປະຕິຮູບທີ່ດິນ ຍັງມີລັກສະນະແຕກຕ່າງ ແລະ ຂັດແຍ່ງກັນ. ຊົນຊັ້ນ ແລະ ຊັ້ນຄົນຈຳນວນຫນຶ່ງ ທີ່ຍັງຕ້ອງການຮັກສາ ສະພາບແບບເກົ່າແກ່ຫລ້າຫລັງນັ້ນ ໄດ້ຂັດຂວາງ ແລະ ຕ້ານກັບການດຳເນີນ ການປະຕິຮູບດັ່ງກ່າວ. ພວກນາຍທຶນຜູກຂາດຕ່າງດ້າວ, ພວກສັກດິນາ,ເຈົ້າ ກົກເຈົ້າເຫລົ່າ, ນາຍທຶນແຫ່ງຊາດ ໄດ້ພ້ອມກັນບີບຮັດລັດ ແລະ ເຂົ້າຂັດ - ຂວາງກັບການດັດສ້າງທີ່ມີລັກສະນະກ້າວຫນ້າດັ່ງກ່າວ.

ສ່ວນຢູ່ໃນບັນດາລັດທີ່ເລືອກເສັ້ນທາງເດີນທີ່ບໍ່ແມ່ນທຶນນິຍົມນັ້ນ ໄດ້ ດຳ ເນີນການປະຕິຮູບທີ່ດິນຂອງສັກດິນາຢ່າງເປັນຂະບວນ ແລະ ທີ່ດິນຂອງສັກດິ-ນາ ກໍຖືກມ້າງເພລົງ, ບໍລິສັດທີ່ດິນຂອງພວກຕ່າງດ້າວກໍຖືກຍຶດເອົາມາ ເປັນ ຂອງລັດ ຫລືບໍ່ກໍຕົກຢູ່ພາຍໃຕ້ການຄວບຄຸມຂອງລັດ, ສ່ວນສະຫະກອນລວມຫມູ່ ຂອງຊາວໄຮ່ນາກໍໄດ້ຮັບການຜັນຂະຫຍາຍກັນຢ່າງກວ້າງຂວາງ ແລະ ມີປະ-ສົບການທີ່ມີຄຸນປະໂຫຍດໃນການຈັດຕັ້ງສະຫະກອນລວມຫມູ່ ຢູ່ໃນຊົນນະບົດ.

ຜູ້ມີບົດບາດຕົ້ນຕໍ ໃນການດັດສ້າງເສດຖະກິດ-ສັງຄົມ ຂອງບັນດາປະ - ເທດກຳລັງພັດທະນາແມ່ນລັດ. ໂດຍດຳເນີນນະໂຍບາຍການເມືອງຕ້ານລະ ບອບຈັກກະພັດນິຍົມ ແລະ ການດັດສ້າງເສດຖະກິດ-ສັງຄົມ ທີ່ມີ ລັກສະນະ ກ້າວຫນ້ານັ້ນ ລັດໄດ້ມີບົດບາດແບບຕັດສິນຊີ້ຂາດໃນການສ້າງຕັ້ງເສດຖະກິດ-ເອກະລາດຂຶ້ນ ເພື່ອຈຸດປະສົງສືບຕໍ່ເສີມຂະຫຍາຍກຳລັງການຜະລິດ ແລະຍົກ ສູງລະດັບຊີວິດການເປັນຢູ່ຂອງຊາວຜູ້ອອກແຮງງານ.

ການຮ່ວມມືລະຫວ່າງປະເທດສັງຄົມນິຍົມ ແລະ ປະເທດທີ່ໄດ້ຮັບການປົດປ່ອຍໃໝ່

ການພົວພັນທາງດ້ານເສດຖະກິດລະຫວ່າງບັນດາປະເທດສັງຄົມນິຍົມ ແລະ ບັນດາປະເທດ ທີ່ໄດ້ຮັບການປົດປ່ອຍໃໝ່ ແມ່ນການພົວພັນເສດຖະກິດລະຫວ່າງຊາດແບບໃໝ່ ຈຶ່ງນອນຢູ່ບົນພື້ນຖານການຮ່ວມ ມືແບບສະເໝີພາບ ແລະ ການຮ່ວມມືແບບຕ່າງຝ່າຍຕ່າງໄດ້ຮັບຜົນ ແລະ ບົນພື້ນຖານການຊ່ວຍເຫລືອກັນໃນການຜ່ານຜ່າຄວາມຫລ້າຫລັງທາງປະຫວັດສາດ.

ຢູ່ໃນການຮ່ວມມື ທາງດ້ານເສດຖະກິດລະຫວ່າງບັນດາປະເທດສັງຄົມນິຍົມ ແລະ ບັນດາປະເທດທີ່ໄດ້ຮັບການປົດປ່ອຍໃໝ່ນັ້ນ ສ່ວນໃຫຍ່ແລ້ວ ແມ່ນການຮ່ວມມືກໍ່ສ້າງກິດຈະການເສດຖະກິດທີ່ສຳຄັນ ຢູ່ໃນປະເທດເຫລົ່ານີ້. ສິ່ງທີ່ແຕກຕ່າງຈາກບັນດາປະເທດມະຫາອຳນາດຈັກກະພັດນັ້ນ ແມ່ນຢູ່ບ່ອນວ່າບັນດາປະເທດສັງຄົມນິຍົມໄດ້ໃຫ້ການຊ່ວຍເຫລືອກ່ອນອື່ນໝົດ ເພື່ອການສ້າງຕັ້ງອຸດສາຫະກຳໜັກ ຢູ່ໃນບັນດາປະເທດກຳລັງພັດທະນາ. ບັນດາປະເທດສັງຄົມນິຍົມ ໄດ້ໃຫ້ການຊ່ວຍເຫລືອກໍ່ສ້າງອຸດສາຫະກຳ, ສ້າງຕັ້ງພື້ນຖານທາງດ້ານພະລັງງານໄຟຟ້າ, ໂລຫະ, ກົນຈັກ ແລະ ທັງໃຫ້ການຊ່ວຍເຫລືອເສີມຂະຫຍາຍ ຂະແໜງການຜະລິດສິນຄ້າສຳລັບປະຊາຊົນນຳອີກ. ເຊັ່ນຕົວຢ່າງ, ສະຫະພາບໂຊວຽດ ໄດ້ສຳເລັດການກໍ່ສ້າງເຂື່ອນໄຟຟ້ານ້ຳຕົກຢູ່ປະເທດ ສາທາລະນະລັດອາລັບຊີ ຈຶ່ງສາມາດຜະລິດພະລັງງານໄຟຟ້າໄດ້ຫລາຍກວ່າ - ກ0% ໃນບໍລິມາດທັງໝົດ ທີ່ຜະລິດຢູ່ໃນທົ່ວປະເທດ, ສຳເລັດການຕິດ ຕັ້ງໂຮງງານຫລອມໂລຫະຂັ້ນສອງຢູ່ປະເທດອາມເຊລີ ຈຶ່ງສາມາດເພີ່ມສະມັດຖະພາບການຜະລິດໄດ້ເຖິງ ८ ລ້ານໂຕນ, ສຳເລັດການກໍ່ສ້າງໂຮງງານອຸດສົມແຮ່ອາລູມິນຽມ ທີ່ສາມາດຜະລິດໄດ້ປະມານ ८,ຄ ລ້ານໂຕນທີ່ປະເທດ ກີເນ ແລະ ອື່ນໆ.ພາຍໃນໄລຍະຫລັງສົງຄາມມານີ້ ດ້ວຍການຊ່ວຍເຫລືອຂອງ ສະຫະພາບໂຊວຽດ ຢູ່ໃນບັນດາປະເທດກຳລັງພັດທະນາ ໄດ້ສຳເລັດການກໍ່ສ້າງໂຮງຈັກໂຮງງານ ແລະ ກິດຈະການຕ່າງໆຫລາຍກວ່າ ພ໓0 ແຫ່ງແລະລວມທັງກຳລັງ ແລະ ກະກຽມການກໍ່ສ້າງ ๑.๑ພ ແຫ່ງ.

ສຳລັບບັນດາປະເທດກຳລັງພັດທະນານັ້ນ ເງື່ອນໄຂໃນການໃຫ້ຄວາມ - ຊ່ວຍເຫລືອທາງດ້ານເສດຖະກິດ ແມ່ນມີຄວາມໝາຍອັນສຳຄັນຄື, ເງິນກູ້ຢືມ

ຈາກສະຫະພາບໂຊວຽດ ແລະ ຈາກບັນດາປະເທດສັງຄົມນິຍົມອື່ນໆ ໄດ້ ຖືກ ທົດແທນດ້ວຍການຈັດສົ່ງສິນຄ້າ ຫລືເງິນຕາທ້ອງຖິ່ນ ຊຶ່ງເປັນເງື່ອນໄຂ ຊ່ວຍ ໃຫ້ບັນດາປະເທດທີ່ຫມຸ່ນນ້ອຍເຫລົ່ານີ້ ສາມາດຂະຫຍາຍຕາຫນ່າງການຄ້າຜົນ ຜະລິດຂອງຕົນໄດ້ ອອກກ້ວາງຂວາງຕື່ມ. ສົ່ງດ່ວງກ່າວນີ້ ສຳຄັນທີ່ສຸດ ສຳລັບ ພວກເຂົາເຈົ້າ ຍ້ອນວ່າ ຢູ່ໃນຕະຫລາດໂລກ ພວກເຂົາເຈົ້າບໍ່ສາມາດ ທຳ ການຊ່ວງເສັງກັບການຜະລິດສິນຄ້າຂອງບັນດາປະເທດທຶນນິຍົມຂະຫຍາຍຕົວ-ໄດ້.

ຮູບການຊ່ວຍເຫລືອທີ່ສຳຄັນອີກຢ່າງຫນຶ່ງ ຂອງບັນດາປະເທດສັງຄົມນິຍົມ ແມ່ນການຊ່ວຍເຫລືອກໍ່ສ້າງພະນັກງານວິຊາສະເພາະ ເພື່ອການຂະຫຍາຍ - ເສດຖະກິດ ແລະ ວັດທະນະທຳຂອງບັນດາປະເທດ ກຳລັງພັດທະນາ. ການ ກໍ່ສ້າງດ່ວງກ່າວ ໄດ້ດຳເນີນໄປດ້ວຍຫລາຍວິທີເຊັ່ນ ກໍ່ສ້າງສັນແບບຢູ່ກັບທີ່ ໃນ ໄລຍະການກໍ່ສ້າງກິດຈະການຕ່າງໆ ແລະ ການນຳເອົາກິດຈະການ ເຫລົ່ານີ້ ມາສູ່ການຜະລິດ ກໍ່ຢູ່ຕາມສະຖາບັນການສຶກສາຊັ້ນສູງແຫ່ງຕ່າງໆຂອງບັນດາ ປະເທດສັງຄົມນິຍົມ.

ບໍ່ລຶມາດ, ຮູບການ ແລະ ເງື່ອນໄຂຂອງການຊ່ວຍເຫລືອທາງດ້ານເສດ ຖະກິດ ທີ່ລະບົບສັງຄົມນິຍົມແຫ່ງໂລກໄດ້ສະຫນອງໃຫ້ແກ່ບັນດາປະເທດ ທີ່ທຳ ການຕໍ່ສູ້ເພື່ອຄວາມເປັນເອກະລາດທາງເສດຖະກິດນັ້ນ ໄດ້ຊ່ວຍໃຫ້ບັນດາປະ ເທດເຫລົ່ານັ້ນ ມີບົດບາດທີ່ຕ້ອງຢ່າງເຂັ້ມແຂງ ຕໍ່ຫນ້າລະບອບຈັກກະພັດນິຍົມ ແລະ ຊ່ວຍຕ້ານລັດທິລ່າຫ້ວເມືອງຂຶ້ນແບບໃຫມ່ນຳອີກ.

ຝ. ການຂະຫຍາຍຕົວຂອງລະບອບທຶນນິຍົມຜູກຂາດ ແຫ່ງລັດ

ການກຳເນີດ ແລະ ເນື້ອໃນຂອງ ລະບອບທຶນນິຍົມຜູກຂາດແຫ່ງ ລັດ

ລະບອບທຶນນິຍົມຜູກຂາດແຫ່ງລັດ ມີລະດັບສູງໃນການທັນພາຫະນະ ການຜະລິດເປັນຂອງສັງຄົມ,ການ ປະສົມການຜູກຂາດສ່ວນຕົວ ແລະ ແຫ່ງລັດເຂົ້າກັນ, ຄະນາທິປະໄຕ ການ ເງິນ ມີອົດທິພົນຕໍ່ກົງຈັກລັດຊຶ່ງສົ່ງດ່ວງກ່າວແມ່ນມີຈຸດປະສົງຢາກເຂົ້າຫຍຸ້ງກ່ຽວ

ພາຍໃນເສດຖະກິດຂອງປະເທດ ເພື່ອສ້າງຮັ່ງຄູນມີໃຫ້ແກ່ພວກນາຍທຶນ ຜູກຂາດເອງ.

ລະບອບທຶນນິຍົມຜູກຂາດແຫ່ງລັດ ໄດ້ເຕົ້າໂຮມກຳລັງແຮງ ຂອງພວກ - ນາຍທຶນຜູກຂາດ ເຂົ້າຮ່ວມກັບກຳລັງແຮງຂອງລັດ ເປັນກົງຈັກອັນດຽວ ກັນ ເພື່ອຈຸດປະສົງສ້າງຮັ່ງຄູນມີໃຫ້ແກ່ພວກນາຍທຶນຜູກຂາດ, ບີບຮັດຂະບວນການ ກຳມະກອນ ແລະ ການຕໍ່ສູ້ປົດປ່ອຍຊາດ, ກອບກູ້ລະບອບທຶນນິຍົມ, ກໍ່ສົງຄາມ ຮຸກຮານຕ່າງໆ.

ໃນໄລຍະທີ່ມີກຳມະສິດສ່ວນຕົວທຶນນິຍົມ ກ່ຽວກັບພາຫະນະການຜະລິດຢູ່ນີ້ ລະດັບການຂະຫຍາຍຕົວສະໄຫມປະຈຸບັນ ຂອງກຳລັງການຜະລິດ, ການປະຕິ ວັດວິທະຍາສາດ-ເຕັກນິກ ໄດ້ສ້າງຂໍ້ຂັດແຍ່ງ ປໍລະປັກກັນຢ່າງຮ້າຍແຮງທີ່ສຸດ ຢູ່ໃນສັງຄົມທຶນນິຍົມ. ເພື່ອກອບກູ້ລະບອບທຶນນິຍົມ ແລະ ຮັບປະກັນ ຄວາມ ອາດສາມາດຂອງພວກນາຍທຶນຜູກຂາດໃຫ້ໄດ້ກອບໂກຍຫມາກຜົນ ແຫ່ງຄວາມ ກ້າວຫນ້າຂອງສັງຄົມ ແລະ ໄດ້ຮັບຜົນກຳໄລຜູກຂາດອັນມະຫາສານນັ້ນ ລັດ ທຶນນິຍົມຈຶ່ງອອກແຮງສຸດຂີດ ແຊກແຊງເຂົ້າໃນເສດຖະກິດ. ສິ່ງທີ່ສຳຄັນທີ່ສຸດ ແມ່ນການວາງໂຄງການຂະຫຍາຍການຜະລິດ, ລັດລົງທຶນໃຫ້ແກ່ວຽກງານ - ການຄົ້ນຄວ້າວິທະຍາສາດ ແລະ ການຜະລິດທາງການທະຫານ, ພະຍາຍາມ ໄກ່ເກັ່ຍ ບັນຫາຕະຫລາດ ແລະ ກໍ່ສ້າງໂຮງຈັກໂຮງງານຂອງລັດຂຶ້ນ. ມາດ ຕະການຂອງລັດທຶນນິຍົມທັງຫມົດນີ້ ແມ່ນເພື່ອຮັບໃຊ້ສິດຜົນປະໂຫຍດຂອງ ຊົນ ຊັ້ນນາຍທຶນ ແລະ ກ່ອນອື່ນຫມົດແມ່ນເພື່ອພວກນາຍທຶນຜູກຂາດຫົວໂປ່ເອງ . ມາດຕາການເຫລົ່ານັ້ນ ອາດຈະເກີດຜົນດີຂຶ້ນໄດ້ໃນກໍລະນີທີ່ມີເງື່ອນໄຂ ອຳ ນວຍໃຫ້ແຕ່ວ່ານັນບໍ່ສາມາດລົບລ້າງຂໍ້ຂັດແຍ່ງພື້ນຖານ ຂອງລະບອບຈັກກະພັດ ນິຍົມໄດ້ເລີຍ.

ພາຍຫລັງສົງຄາມໂລກຄັ້ງທີສອງ ການຫັນການຜະລິດເປັນຂອງ ສັງຄົມ ແລະ ການຜູກຂາດເສດຖະກິດໄດ້ຂຶ້ນສູ່ລະດັບສູງ, ໄດ້ສ້າງພື້ນຖານຢ່າງ ພາ ວະວິໄສແກ່ລະບອບທຶນນິຍົມຜູກຂາດໃຫ້ກ້າວຂຶ້ນເປັນການຜູກຂາດແຫ່ງລັດແລະ ເພື່ອເພີ່ມທະວີການແຊກແຊງຂອງລັດເຂົ້າໃນເສດຖະກິດທຶນນິຍົມ. ການ ຜູກ ຂາດນັບມື້ນັບປະສານສົມທົບກັນຢ່າງແຫນ້ນຫນາ ກັບກົງຈັກລັດ. ລັດຕ້ອງ ໄດ້ ອອກແຮງສູ້ຊົນເຮັດການຜະລິດສຳ ເພື່ອສິດຜົນປະໂຫຍດຂອງພວກຜູກຂາດ.

ໂດຍຄອບຄອງແຫລ່ງເສດຖະກິດຢ່າງໃຫຍ່ຫລວງນັ້ນ ລັດໄດ້ໃຫ້ການ ບໍລິ ການສຸດຂີດແກ່ພວກນາຍທຶນຜູກຂາດ, ສະເໜີການສັ່ງຈອງທີ່ຜົນກຳໄລສູງ, ຂາຍວັດຖຸດິບ ແລະ ພະລັງງານໃຫ້ພວກເຂົາເຈົ້າດ້ວຍລາຄາຕ່ຳ, ສ້າງ - ເງື່ອນໄຂອັນດີໃຫ້ແກ່ການກົດຂີ່ຂູດຮີດຊາວຜູ້ອອກແຮງງານ. ໂດຍເພີ່ມທະວີ ການຫັນເສດຖະກິດໄປທາງການທະຫານ ແລະ ກໍ່ສ້າງຄາມຮຸກຮານຕ່າງໆ ລັດ ທຶນນິຍົມໄດ້ຮັບປະກັນການສັ່ງຈອງການຜະລິດພາຫະນະ ສົງຄາມ ທີ່ເປັນພົນດີ ແລະ ກຳໄລອັນມະຫາສານໃຫ້ແກ່ພວກນາຍທຶນຜູກຂາດ.

ສິ່ງສຳຄັນອີກຢ່າງໜຶ່ງ ທີ່ພາໃຫ້ລະບອບທຶນນິຍົມຜູກຂາດໄດ້ກ້າວຂຶ້ນເປັນ ລະບອບທຶນນິຍົມຜູກຂາດແຫ່ງລັດນັ້ນ ແມ່ນການຂັດແຍ່ງລະຫວ່າງພວກຈັກກະພັດ ດ້ວຍກັນ, ລະຫວ່າງລະບອບຈັກກະພັດນິຍົມ ແລະ ບັນດາປະເທດກຳລັງ ພັດ ທະນາ, ລະຫວ່າງລະບົບສັງຄົມນິຍົມແຫ່ງໂລກ ແລະ ລະບອບທຶນນິຍົມ ສະ ໄໝປະຈຸບັນ. ຢູ່ໃນສະພາບເຊັ່ນນີ້ ການນຳໃຊ້ໜ້າທີ່ພາຫະນະຂອງລັດທຶນນິຍົມ ໃນການແກ້ໄຂຂໍ້ຂັດແຍ່ງຕ່າງໆ ເພື່ອສົດຜົນປະໂຫຍດຂອງການຜູກຂາດແຫ່ງ-ຊາດນັ້ນ ແມ່ນເປັນສິ່ງທີ່ຈຳເປັນທີ່ສຸດສຳລັບກຸ່ມຜູກຂາດແຫ່ງຊາດ. ການ ຂັດ ແຍ່ງພາຍໃນຢ່າງຮ້າຍແຮງຂອງລະບອບທຶນນິຍົມ ໄດ້ຮັດໃຫ້ລັດທຶນນິຍົມຕ້ອງ ເພີ່ມທະວີການເຂົ້າຂັດຂວາງການຕໍ່ສູ້ຊົນຊັ້ນ ເພື່ອສົດຜົນປະໂຫຍດຂອງເງິນ-ທຶນຜູກຂາດ ແລະ ຕ້ານຊົນຊັ້ນກຳມະກອນ.

ຮູບການຕ່າງໆຂອງລະບອບທຶນນິຍົມຜູກຂາດ

ລະບອບທຶນນິຍົມຜູກຂາດແຫ່ງລັດ ສະແດງຕົວອອກໃນຫລາຍຮູບການທີ່ ແຕກ ຕ່າງກັນ. ຮູບການຕົ້ນຕໍຂອງມັນມີ 2: ກຳ ມະສິດຜູກຂາດແຫ່ງລັດ ແລະ ການຊົມໃຊ້ແຫ່ງລັດ, ການໄກ່ເກ່ຍເສດຖະກິດ ໂດຍການ ຜູກຂາດແຫ່ງລັດ ແລະ ການວາງໂຄງການເສດຖະກິດ, ການ ແບ່ງປັນສ່ວນລາຍໄດ້ແຫ່ງຊາດໂດຍລັດ, ການຫັນເສດຖະກິດໄປທາງການທະ ຫານ ແລະຮູບການອື່ນໆ. ພວກເຮົາມາສຶກສາເບິ່ງຮູບການຈຳນວນໜຶ່ງ ນຳ ກັນ.

ຮູບການກຳມະສິດຜູກຂາດແຫ່ງລັດ ແມ່ນໜຶ່ງໃນຈຳນວນປະກົດການແຫ່ງ ການເຕີບໃຫຍ່ຂອງລະບອບທຶນນິຍົມຜູກຂາດແຫ່ງລັດ ໃນເງື່ອນໄຂ ປະຈຸບັນ

ແລະ ກ່ອນອື່ນໝົດ ແມ່ນກຳມະສິດແຫ່ງລັດ ຕໍ່ໂຮງຈັກໂຮງງານອຸດສາຫະກຳ, ອົງການຂົນສົ່ງ, ທະນາຄານ ແລະ ອື່ນໆ. ກຳມະສິດດັ່ງກ່າວນີ້ ໄດ້ເກີດຂຶ້ນ ດ້ວຍວິທີການກໍ່ສ້າງກໍ່ຕະການໃໝ່ໆ ໂດຍອາໄສເງິນງົບປະມານຂອງ ລັດ ແລະ ໂດຍສະເພາະຢ່າງຍິ່ງແມ່ນເພື່ອຈຸດປະສົງທາງການທະຫານ ນອກຈາກ ນີ້ ລັດໄດ້ຊຸມສ່ວນຜູກຂາດ ແລະ ສ້າງຕັ້ງກໍ່ຕະການແບບປະສົມຂຶ້ນ. ກຳ ມະສິດລັດ ຍັງໄດ້ປະກົດຂຶ້ນທັງຢູ່ໃນຂະແໜງການທີ່ພົວພັນເຖິງການປະຕິວັດວິ ທະຍາສາດ-ເຕັກນິກ ທີ່ຮຽກຮ້ອງໃຫ້ມີການລົງທຶນເປັນຈຳນວນຫລວງຫລາຍ- (ອຸດສາຫະກຳດ້ານປະລະມານູ, ເຄມີ ເອເລັກໂຕຣນິກ-ວິທະຍຸແລະອື່ນໆ) ແຕ່ວ່າຂະແໜງການເຫລົ່ານີ້ຈະບໍ່ເກີດຜົນກຳໄລໄດ້ໃນທັນທີທັນໃດ.

ສິ່ງສຳຄັນທີ່ພາໃຫ້ເກີດມີກຳມະສິດແຫ່ງລັດຂຶ້ນນີ້ ແມ່ນຍອມກຳມະສິດທຶນນິ ຍົມ ຕົກຂຶ້ນເປັນຂອງລັດ, ໝາຍຄວາມວ່າ ມອບກຳມະສິດຜູກຂາດໄປຢູ່ໃນ- ກຳມືລັດ. ລັດທຶນນິຍົມ ໄດ້ກາຍເປັນເຈົ້າກຳມະສິດລວມຕໍ່ຊັບສົມບັດທີ່ຂຶ້ນເປັນ ຂອງລັດໂດຍທັງໝົດ. ລັດໄດ້ສືບຕໍ່ດຳເນີນການກົດຂີ່ຂູດຮີດຊາວກຳມະກອນຢູ່ ຕາມໂຮງຈັກໂຮງງານຕ່າງໆ ເປັນຂອງລັດ ເພາະລັດ ແມ່ນຕົວແທນຂອງຊົນ ຊັ້ນນາຍທຶນທັງໝົດ ແລະ ກ່ອນອື່ນໝົດ ແມ່ນຕົວແທນຂອງເງິນທຶນຜູກຂາດ- ຂອງປະເທດ. ກົງຈັກລັດໄດ້ທຳການຄວບຄຸມເບ່ງແຍງຊັບສົມບັດ ທີ່ຕົກ ເປັນ ຂອງລັດ ແຕ່ສ່ວນບົດບາດການນຳພາຕົ້ນຕໍນັ້ນ ແມ່ນຂຶ້ນກັບພວກຕົວແທນຂອງ- ເງິນທຶນຜູກຂາດ ແລະ ຄະນາທິປະໄຕການເງິນ.

ພວກນາຍທຶນຜູກຂາດ ໄດ້ຍອມສົ່ງໂຮງຈັກໂຮງງານ ແລະ ຂະແໜງ - ການຜະລິດໃດໜຶ່ງໃຫ້ແກ່ລັດ ດ້ວຍຈຸດປະສົງຢາກກອບກູ້ລະບອບທຶນນິຍົມ ໄວ້ ໃຫ້ໝັ້ນຄົງຕໍ່ໄປ. ຊົນຊັ້ນກຳມະກອນອາດຈະນຳໃຊ້ຂະແໜງການເສດຖະ- ກິດຈຳນວນໜຶ່ງ ທີ່ເປັນຂອງລັດ ເພື່ອຮັດແໜ້ນກຳລັງແຮງຕ້ານກັບພວກນາຍ ທຶນຜູກຂາດ ແລະ ເພື່ອຂະຫຍາຍກວ້າງວົງການຕໍ່ສູ້ຂອງຊາວຜູ້ອອກແຮງງານ ຕ້ານການຜູກຂາດ ເພື່ອຄວາມເປັນປະຊາທິປະໄຕທັງໝົດ.

ລະບອບທຶນນິຍົມຜູກຂາດແຫ່ງລັດ ຍັງມີ<u>ຮູບການການນຳໃຊ້ແຫ່ງລັດ</u> ຊຶ່ງ ເບ່ງຕາມລັກສະນະພາຍນອກແລ້ວ ແມ່ນການເກັບຊື້ສົມຄາໂດຍລັດ ແລະການ ບໍລິການຕ່າງໆ. ການເກັບຊື້ຂອງລັດ ໄດ້ເຮັດໃຫ້ທອງຕະຫລາດມີຄວາມໝັ້ນ ຄົງຢ່າງສ້າງເງື່ອນໄຂໃຫ້ພວກນາຍທຶນຜູກຂາດໄດ້ຮັບກຳໄລສູງຂຶ້ນ ກໍເພາະວ່າ

ລັດໄດ້ເກັບຊື້ສິນຄ້າພວກນາຍທຶນຜູກຂາດດ້ວຍລາຄາສູງ. ສ່ວນໃຫຍ່ ແລ້ວ ການເກັບຊື້ຂອງລັດ ແມ່ນເລັ່ງໃສ່ການຊຸມໃຊ້ທີ່ບໍ່ເປັນລັກສະນະການຜະລິດຊຶ່ງ ພົວພັນເຖິງການຫັນເສດຖະກິດໄປທາງການທະຫານ ແລະ ລວມທັ້ງການເກັບ ຊື້ສ່ວນເສດເກີນຂອງສິນຄ້າ ທັ້ງນີ້ກໍເພື່ອຊຸກຍູ້ ເສີມຂະຫຍາຍການຜະລິດ ໃດ ໜຶ່ງ ຂອງເສດຖະກິດທຶນນິຍົມເອງ. ໂດຍສະເພາະຢ່າງຍິ່ງ ສົ່ງຜົນກະທົບ-ກະທຳກັນຂຶ້ນໃນເມື່ອການຈຳໜ່າຍສິນຄ້າຂອງພວກນາຍທຶນຜູກຂາດ ໄດ້ ພົບກັບຄວາມຫຍຸ້ງຍາກ ແລະ ພວກນາຍທຶນຜູກຂາດຕົກຢູ່ໃນສະພາບການອັນໜັກ ໜ່ວງຍອມຈຳເປັນຕ້ອງທຳການປັ່ນທອນການຜະລິດລົງ. ເຊັ່ນຕົວຢ່າງ,ຢູ່ ໃນສະຫະລັດອາເມລິກາ ລັດໄດ້ຮັບປະກັນຊື້ຜົນຜະລິດກະສິກຳທັ້ງໝົດນຳພວກ ຊາວກະສິກອນ.

ລັດມີກິດຈະການເປັນຂອງຕົນເອງ ເພາະສະນັ້ນ ລັດຈຶ່ງເປັນທັ້ງຜູ້ ຈຳ ໜ່າຍສິນຄ້າ ແລະ ການບໍລິການຕ່າງໆນຳອີກ. ຢູ່ໃນບາງປະເທດ ລັດໄດ-ສະໜອງຖ່ານຫີນ, ພະລັງງານໄຟຟ້າໃຫແກເຈົ້າຂອງໂຮງຈັກໂຮງງານ,ປະ ຕິບັດການຂົນສົ່ງທາງລົດໄຟ, ຈຳໜ່າຍສະບຽງອາຫານ, ວັດຖຸດິບ ສຳຮອງ ແລະ ອື່ນໆອີກ. ລັດໄດ້ຈຳໜ່າຍສິນຄ້າໃຫແກພວກນາຍທຶນຜູກ ຂາດສ່ວນຕົວ ດ້ວຍລາຄາຕ່ຳ, ສ່ວນການບໍລິການແມ່ນດ້ວຍອັດຕາຕ່ຳກວ່າທີ່ບໍລິການໃຫ້ ແກ ປະຊາຊົນຕ້ວງຫລາຍທົບ. ດ້ວຍເຫດນີ້ ລັດທຶນນິຍົມສະໄໝປະຈຸບັນຈຶ່ງໄດ້ກາຍ ເປັນຜູ້ຮັບເໝົາ ເພື່ອຈຸດປະສົງຂອງທຶນຜູກຂາດ.

ການເກີດມີກຳມະສິດແຫ່ງລັດນີ້ ບໍ່ໄດ້ໝາຍເຖິງການກຳເນີດໂດ່ງ ປະ ກອບໃດໜຶ່ງຂອງລະບອບສັງຄົມນິຍົມເລີຍ ເໝືອນດັ່ງພວກນັກປະຕິຮູບ ແລະ ພວກລັດທິແກ້ທັ້ງຫລາຍ ໄດ້ພາກັນຍືນຍັນໄວ້. ແຕ່ວ່າການກຳເນີດກຳມະ ສິດ ແຫ່ງລັດໄດ້ເຮັດໃຫ້ມີການຫັນປ່ຽນການພົວພັນແຫ່ງການຜະລິດທຶນນິຍົມໄດ້ ໃນ ລະດັບໃດໜຶ່ງ ແລະ ທາດແທ້ຂອງມັນມີຢູ່ບ່ອນວ່າ ໃນປະຈຸບັນນີ້ແມ່ນ ພວກ ນາຍທຶນຫລືສະຫະບໍລິສັດໃດໜຶ່ງ ທີ່ຕ້ານຢັນກັບຊາວກຳມະກອນ ແຕ່ພົດ ແມ່ນ ທຶນຜູກຂາດທັ້ງໝົດ ຊຶ່ງລັດເປັນຜູ້ໃຫ້ການສະໜັບສະໜູນແກ່ສິດຜົນປະໂຫຍດ ຂອງພວກນາຍທຶນຜູກຂາດ.

ອີກຮູບການໜຶ່ງ ທີ່ສຳຄັນຂອງລະບອບທຶນນິຍົມຜູກຂາດແຫ່ງລັດ ໄດ້ແກ່ ການໄກ່ເກ່ຍເສດຖະກິດໂດຍລັດ. ມັນພົວພັນຢ່າງແໜ້ນແຟ້ນ ກັບການຕີບ

ໃຫຍ່ຂະຫຍາຍຕົວຂອງກຳມະສິດລັດ, ການຊຸດສາທະກຳການທະຫານຄົບຊຸດ, ນະໂຍບາຍງົບປະມານ-ເງິນກູ້ຢືມ ແລະການເກັບສ່ວຍ. ໂດຍອີງອາໄສ ນະໂຍບາຍດັ່ງກ່າວນີ້ ລັດໄດ້ຮັບປະກັນທຶນຮອນໃຫແກ່ການຜູກຂາດ ແລະ ຂະແໜງການຜະລິດໃດໜຶ່ງ, ກຳນົດມູນຖານເກັບກູດອກເບ້ຍ, ດຳເນີນນະໂຍບາຍອຸກຍູການຫລຸຍຫຽນ, ຫລຸດຜ່ອນການເກັບພາສີຈາກກຳໄລ ແລະ ອື່ນໆ.

ຢູ່ໃນສະພາບເງື່ອນໄຂທີ່ເສດຖະກິດທຶນນິຍົມບໍ່ໝັ້ນຄົງ ລັດໄດ້ນຳໃຊ້ວິ ທີການໄກ່ເກ່ຍດ້ານວົງຈອນຢ່າງກວ້າງຂວາງທີ່ສຸດ, ເນື້ອໃນ້ຂອງມັນແມ່ນຢຸດຕິ ການລົງທຶນໃນໄລຍະພາກວົງຈອນຍົກຕົວ ດວຍຈຸດປະສົງຫລີກເວັ້ນການຜະລິດ ລົ້ນເກີນ ແຕ່ຈະຂອກແຮງສຸມການລົງທຶນໃນຊ່ວງໄລຍະພາກວົງຈອນວິກິດ ການ ແລະ ພາກຊຸດໂຊມດວຍຈຸດປະສົງຈຳກັດການຜະລິດຕົກຕ່ຳ ແລະ ຊຸກຍູ ທາງອອກຈາກວິກິດການ.

ຢູ່ໃນການໄກ່ເກ່ຍເສດຖະກິດທຶນນິຍົມນີ້ ບົດບາດອັນໃຫຍ່ຫລວງທີ່ສຸດແມ່ນ ເປັນຂອງງົບປະມານລັດຊຶ່ງກວມເອົາພາກສ່ວນໃຫຍ່ ຂອງລາຍໄດ້ແຫ່ງຊາດ. ໂດຍອາໄສງົບປະມານນີ້ ລາຍໄດ້ແຫ່ງຊາດໄດ້ຖືກຕັດສ່ວນແບ່ງຊຳລຶມໄປເປັນ ຜົນດີໃຫ້ແກ່ພວກນາຍທຶນຜູກຂາດ.

ການໄກ່ເກ່ຍ ແຫ່ງລັດຍັງໄດ້ກວມເອົາການພົວພັນ ລະຫວ່າງແຮງງານ ແລະ ເງິນທຶນອີກ. ໂດຍສະເພາະຢ່າງຍິ່ງໃນກໍລະນີໄພເງິນເຟີ້ບຕົວຂຶ້ນສູງ ລັດທຶນນິຍົມໄດ້ນຳໃຊ້ມາດຕາການ "ສະກັດກັ້ນ" ອັດຕາຄ່າແຮງງານ,ບີບຮັດ ຂະບວນປະທ້ວງຂອງຊາວກຳມະກອນຊຶ່ງຮຽກຮ້ອງໃຫ້ຍົກລະດັບອັດຕາຄ່າແຮ ງງານໃຫ້ສູງຂຶ້ນ ແລະ ປັບປຸງເງື່ອນໄຂອອກແຮງງານ. ໃນຕົວຈິງແລ້ວ ມາດ ຕາການວາດວຍການໄກ່ເກ່ຍການພົວພັນດ້ານແຮງງານນີ້ ແມ່ນແນໃສ່ຕ້ານ - ຊາວກຳມະກອນ ເພື່ອສິດຜົນປະໂຫຍດຂອງພວກນາຍທຶນຜູກຂາດເອງ.

ພ້ອມດຽວກັບການໄກ່ເກ່ຍການຜູກຂາດແຫ່ງລັດນີ້ ກໍຍັງມີການວາງໂຄງ-ການເສດຖະກິດທຶນນິຍົມອີກ ຊຶ່ງເປັນຮູບການຢ່າງໜຶ່ງ ໃນການແຊກແຊງ - ຂອງລັດເຂົ້າໃນຂະບວນການຜະລິດສຳ ແບບທຶນນິຍົມ. ການວາງໂຄງ ການ ເສດຖະກິດທຶນນິຍົມ ແມ່ນການປະກອບສ້າງໂຄງການໃນໄລຍະຍາວນານຂອງ ກົງຈັກລັດ ເພື່ອຜັນຂະຫຍາຍເສດຖະກິດ: ການລົງທຶນ, ການຂາອອກ,ການ ຂາເຂົ້າ, ວຽກງານຄົ້ນຄວ້າວິທະຍາສາດ, ການກຳນົດຄວາມກ້າວໜ້າລະ

ຫວ່າງຂະແຫນງການຜະລິດຕ່າງໆ, ກໍ່ສ້າງນັກວິຊາການ ແລະ ອື່ນໆ. ໂຄງການທັງຫມົດເຫລົ່ານີ້ ລ້ວນແຕ່ແນໃສ່ຮັບປະກັນເງື່ອນໄຂສະດວກແກ່ ການເຄື່ອນໄຫວຂອງພວກນາຍທຶນຜູກຂາດ, ໂຄງການຕ່າງໆ ທີ່ກົງຈັກລັດທຶນນິຍົມປະກອບຂຶ້ນມານີ້ ແມ່ນມີລັກສະນະຂໍ້ສະເຫນີແນະ ແກ່ພວກນາຍທຶນ ຜູກຂາດສ່ວນຕົວເທົ່ານັ້ນ. ບັນດາລັດທຶນນິຍົມ ຈາຕ້ອງໄດ້ນາໍໃຊ້ໂຄງການເສດຖະກິດເນື່ອງຈາກ ຜົນແຫ່ງການຫັນພາຫະນະການຜະລິດເປັນຂອງສັງຄົມໃນລະດັບ-ສູງ ແລະ ຜົນຈາກຂໍ້ຂັດແຍ່ງແຫ່ງການຜະລິດສາໍແບບທຶນນິຍົມ.

ການວາງໂຄງການທຶນນິຍົມແຕກຕ່າງຈາກການຂຶ້ນແຜນການ ເສດຖະກິດແຫ່ງຊາດ ຢູ່ໃນບັນດາປະເທດສັງຄົມນິຍົມ. ລະບອບທຶນນິຍົມຜູກຂາດແຫ່ງລັດບໍ່ໄດ້ຍົກເລີກກາໍມະສິດສ່ວນຕົວກຽວກັບພາຫະນະການຜະລິດ ແລະ ບໍ່ມີຄວາມອາດສາມາດຮັບປະກັນການຂະຫຍາຍຕົວຂອງເສດຖະກິດແຫ່ງຊາດຢ່າງມີແຜນການແຕ່ຢ່າງໃດ.

ຫນຶ່ງໃນຈາໍນວນຈຸດສາໍຄັນ ຂອງລະບອບທຶນນິຍົມຜູກຂາດແຫ່ງລັດ ແມ່ນການເພີ່ມທະວີ<u>ການຫັນເສດຖະກິດໄປທາງການທະຫານ</u> ແລະ <u>ການຊ່ວງເສັງປະກອບອາວຸດ.</u> ການຫັນເສດຖະກິດໄປທາງການທະຫານ ໄດ້ເຮັດໃຫ້ລັດທຶນນິຍົມກາຍເປັນຜູ້ຊົມໃຊ້ສິນຄ້າ ແລະ ການບໍລິການຕ່າງໆ. ການສະເຫນີ ສັ່ງຈອງຈາໍນວນຫລວງຫລາຍຂອງລັດຖະບານ ຕໍ່ການຜະລິດອາວຸດ, ການໃຊ້ - ຈ່າຍ ເພື່ອຄາໍ້ປະກັນກາໍລັງປະກອບອາວຸດ, ການຜະລິດອາວຸດຍຸດທະສາດສາໍຮອງຕ່າງໆ ໄດ້ເຮັດໃຫ້ການໃຊ້ຈ່າຍທາງກົງ ທາງດ້ານທະຫານ ກວມເອົາເຖິງ ๕๐% ແລະ ສູງກວ່າໃນບໍລິມາດກ້ອນເງິນໃຊ້ຈ່າຍງົບປະມານລັດ.ຢູ່ໃນບັນດາປະເທດທຶນນິຍົມຕົ້ນຕໍ ການຫັນເສດຖະກິດ ໄປທາງການທະຫານໄດ້ພົວພັນຢ່າງແຫນ້ນແຟ້ນກັບການເຄື່ອນໄຫວຂອງອຸດສາຫະກາໍການທະຫານ ຄົບຊຸດຊຶ່ງເປັນພາກສ່ວນປະກອບອັນຫນຶ່ງຂອງລະບອບທຶນນິຍົມຜູກຂາດແຫ່ງລັດ.

<u>ການອຸດສາຫະກາໍທະຫານຄົບຊຸດ</u> ແມ່ນສາໍພັນທະພາບລະຫວ່າງພວກນາຍທຶນຜູກຂາດອຸດສາຫະກາໍທະຫານ , ກຸ່ມປະຕິການ ແລະ ກຸ່ມອາດຍາສິດແຫ່ງລັດໃນການເພີ່ມທະວີຄວາມເຂັ້ມແຂງທາງດ້ານທະຫານ ເພື່ອຮັດແຫນ້ນ ແລະ ຂະຫຍາຍກວ້າງການຄອບຄອງຊົນຊັ້ນຂອງພວກນາຍທຶນຜູກຂາດ ແລະ ໄດ້ຜົນກາໍໄລສ່ວນຕົວຂອງພວກເຂົາເຈົ້າ. ພື້ນຖານທາງດ້ານວັດຖຂອງສາໍພັນ ທະ

ພາບດັ່ງກ່າວນັ້ ແມ່ນການຊ່ວງເສັ້ງປະກອບອາວຸດ ແລະ ການຂະຫຍາຍເສດ ຖະກິດການທະຫານ. ຫລັງຈາກສົງຄາມໂລກຄັ້ງທີ່ສອງ ອຸດສາຫະກຳການທະ ຫານຄົບວຸດໄດ້ຮັບການເສີມຂະຫຍາຍຢ່າງກວ້າງຂວາງທີ່ສຸດ ຢູ່ໃນສະຫະລັດ-ອາເມລິກາ ແລະ ລວມທັ້ງຢູ່ໃນບັນດາປະເທດຈັກກະພັດອື່ນໆອີກດ້ວຍ.

ການອຸດສາຫະກຳການທະຫານຄົບວຸດ ໄດ້ກວມລວມເອົາທັ້ງການເມືອງ, ເສດຖະກິດ ແລະ ຂົງເຂດຊີວິດສັງຄົມຕ່າງໆຂອງ ບັນດາປະເທດມະຫາອຳ-ນາດຈັກກະພັດ ແລະ ປະຕິບັດການສັ່ງຈອງຂອງລັດທຶນນິຍົມ ໃນການຜະລິດ-ອາວຸດດ້ວຍມູນຄ່າຫລາຍໆຕື້ໂດລາ. ການຜະລິດທາງດ້ານການທະຫານໄດ້ຮັບ ປະກັນໃຫ້ສະຫະບໍລິສັດອຸດສາຫະກຳທະຫານໄດ້ຮັບກຳໄລຢ່າງມະຫາສານ ຊຶ່ງ ມາດຕະຖານກຳໄລສູງກວ່າພາກສ່ວນເສດຖະກິດທີ່ບໍ່ເປັນລັກສະນະທາງ ການ ທະຫານນັ້ນຫລາຍທົບ.

ເພື່ອຈະໄດ້ຮັບການສະໜັບສັ່ງຈອງການຜະລິດທາງດ້ານການທະຫານ - ແລະ ຜົນກຳໄລ ໃຫ້ສູງກວ່ານັ້ນ ພວກຜະລິດອາວຸດກຸ່ມໃຫຍ່ ໄດ້ສ້າງສາຍ ພົວພັນຢ່າງແໜ້ນໜາກັບກົງຈັກບໍລິຫານ ແລະ ນິຕິບັນຍັດແຫ່ງອຳນາດ ລັດ ເພື່ອຍຶກຕົວແທນຂອງຕົນຂຶ້ນກຳໜ້າທີ່ຕຳແໜ່ງຂັ້ນສູງຢູ່ໃນສຳນັກງານງົບການ ການທະຫານ, ໂດຍໝູນໃຊ້ການຮ່ວມສຳພັນສ່ວນຕົວຂອງຕົນ ແລະ ວິທີອື່ນໆ.

ອຸດສາຫະກຳການທະຫານຄົບວຸດພະຍາຍາມເພີ່ມທະວີການຈັດສົ່ງອາວຸດໄປ ຍັງປະເທດອື່ນໆ, ນຳໃຊ້ທຸກວິທີການເພື່ອຕ້ານຢັ້ນກັບການຫລຸດຜ່ອນ ຄວາມ ເຄັ່ງຕຶງສາກົນ, ສ້າງຄວາມວຸ້ນວາຍທາງການທະຫານ ແລະ ແຜ່ຂະຫຍາຍເຂດ ຂັ້ນ ແລະ ທຳການຊ່ວງເສັ້ງປະກອບອາວຸດກັນເປັນການໃຫຍ່.

ຮູບການສາກົນແຫ່ງລະບອບທຶນ ນິຍົມຜູກຂາດແຫ່ງລັດ	ໜຶ່ງໃນຈຸດພິເສດສຳຄັນແຫ່ງການຂະ ຫຍາຍຕົວຂອງບັນດາປະເທດທຶນນິຍົມ ພາຍຫລັງສົງຄາມໂລກຄັ້ງທີ່ສອງແມ່ນ

ການປະກົດຕົວ ຂອງຮູບການ ສາກົນແຫ່ງລະບອບທຶນນິຍົມຜູກຂາດ ແຫ່ງ ລັດ.

ສາຍເຫດອັນສຳຄັນຢ່າງພາວະວິໄສ ທີ່ພາໃຫ້ເກີດມີຮູບການເຫລົ່ານັ້ນຂຶ້ນ ແມ່ນການສືບຕໍ່ຂະຫຍາຍຕົວຂອງກຳລັງການຜະລິດ ແລະ ການເພີ່ມທະວີ ຂະ

ບວນການຫັນກ່ານຜະລິດເປັນຂອງສັງຄົມ, ເສີມຂະຫຍາຍການປະຕິວັດ ວິທະ ຍາສາດ-ເຕັກນິກ, ຂໍ້ຂັດແຍ່ງຢ່າງຮ້າຍແຮງຂອງລະບອບຈັກກະພັດນິຍົມ.

ກຳລັງອັນເຂັ້ມແຂງຂອງລະບອບສັງຄົມນິຍົມ ແລະ ການເພີ່ມທະວີ ຂະ ບວນການປົດປ່ອຍຊາດ, ການພັງທະລາຍຂອງລັດທິລ່າຫົວເມືອງຂຶ້ນ ທັງຫມົດ ນີ້ ໄດ້ເຮັດໃຫ້ບັນດາປະເທດທຶນນິຍົມຈຳຕ້ອງຫັນຫນ້າເຂົ້າຫາກັນ ເພື່ອ .ທຳ ການຕໍ່ສູ້ຮ່ວມກັນຕ້ານກັບ ລະບົບສັງຄົມນິຍົມແຫ່ງໂລກ ແລະ ດຳເນີນ ນະໂຍ ບາຍການເມືອງລ່າຫົວເມືອງຂຶ້ນແບບໃຫມ່. ສິ່ງເຫລົ່ານີ້ ໄດ້ເຮັດໃຫ້ຮູບການ ສາກົນແຫ່ງລະບອບທຶນນິຍົມຜູກຂາດແຫ່ງລັດ ໄດ້ຮັບການເສີມຂະຫຍາຍຂຶ້ນຕື່ມ.

ຈຸດປະສົງຂອງການສ້າງຕັ້ງຮູບການສາກົນແຫ່ງລະບອບທຶນນິຍົມ ຜູກຂາດ ແຫ່ງລັດ ແມ່ນເພື່ອໄກ່ເກ່ຍບັນຫາການພົວພັນເສດຖະກິດລະຫວ່າງປະເທດ . ເພື່ອໃຫ້ເຂົ້າໃຈລະອຽດຕື່ມກ່ຽວກັບການໄກ່ເກ່ຍຂົງເຂດເສດຖະກິດຕ່າງໆນັ້ນ ສາມາດແຍກອອກເປັນສອງຮູບການ.

ຮູບການທີຫນຶ່ງ ແມ່ນການໄກ່ເກ່ຍບັນຫາການພົວພັນເສດຖະກິດລະຫວ່າງ ປະເທດໃນຂົງເຂດໃດຫນຶ່ງ, ເຊັ່ນ, ການຄ້າຕ່າງປະເທດ ແລະການຂົນສົ່ງ, ເງິນກູ້ຢືມສາກົນ ແລະ ການພົວພັນເງິນຕາຕ່າງປະເທດ.

ເຊັ່ນໃນປີ ຈພ.ຄ ໄດ້ມີການເຊັນສັນຍາລວມວ່າດ້ວຍອັດຕາພາສີ ແລະ ການຄ້າ ຊຶ່ງເປັນສັນຍາການຄ້າສາກົນ ທີ່ມີລັກສະນະສຳຄັນທີ່ສຸດ ແລະ ມີ ຫລາຍກວ່າ ກ.ຕ ປະເທດເຂົ້າເປັນສະມາຊິກ. ນະໂຍບາຍດ້ານການຄ້າຂອງ ກຸ່ມນີ້ ຖືກກຳນົດຂຶ້ນ ແລະ ຄວບຄຸມໂດຍບັນດາປະເທດມະຫາອຳນາດຈັກກະ-ພັດ. ຢູ່ໃນນະໂຍບາຍການເມືອງຂອງກຸ່ມນີ້ ບໍ່ມີຜົນສະທ້ອນອັນດີແຕ່ຢ່າງ ໃດ ແກ່ ສິດຜົນປະໂຫຍດຂອງບັນດາປະເທດກຳລັງພັດທະນາ, ສິດທິ ໃນການປົກ ປ້ອງເສດຖະກິດຂອງຕົນ ແລະ ສິດທິໃນຄວາມຫມັ້ນຄົງ ທາງດ້ານລາຄາວັດຖຸ ດິບ ແລະ ສະບຽງອາຫານແຕ່ຢ່າງໃດເລີຍ.

ໃນປີ ຈພ.ຄ ອົງການເງິນໂລກ ແລະ ທະນາຄານເພື່ອການຟື້ນຟູ ແລະ ພັດທະນາສາກົນ ກໍໄດ້ເກີດຂຶ້ນແລະກໍເລີ່ມເຄື່ອນໄຫວໃນທັນໃດ. ເຖິງ ແມ່ນ ວ່າອົງການ ແລະ ທະນາຄານເຫລົ່ານີ້ຈະຖືກສ້າງຕັ້ງຂຶ້ນເປັນຂະແຫນງພິເສດ ຂອງສະຫະປະຊາຊາດກໍຕາມ ແຕ່ຕົວຈິງແລ້ວ ແມ່ນຕົກຢູ່ພາຍໃຕ້ການຄວບຄຸມ ຂອງຄະນາທິປະໄຕການເງິນຂອງສະຫະລັດອາເມລິກາ.

ຮູບການສ້າງຫົນອັນທີສອງຂອງລະບອບທຶນນິຍົມຜູກຂາດແຫ່ງລັດ ແມ່ນການປະສານງານກັນຂອງຈັກກະພັດ ຊຶ່ງກ່ອມລວມໜົດທຸກການພົ່ວພັນຄົບຊຸດ ລະຫວ່າງປະເທດຕ່າງໆດ້ວຍກັນ. ຕົວຢ່າງຂອງຮູບການນີ້ ແມ່ນອົງການເສດຖະກິດເອີລົບ (CEE) ຫລື "ຕະຫລາດຮ່ວມເອີລົບ" ແລະອົງການການຄ້າເສລີເອີລົບ (EACT).

ຢູ່ພາຍໃນອົງການຕະຫລາດຮ່ວມເອີລົບນີ້ ໄດ້ກ້ານົດລະບຽບວ່າດ້ວຍການໜູນວຽນສິນຄ້າຢ່າງເສລີ ໂດຍປາສະຈາກການເກັບພາສີຜ່ານແດນ, ການໜູນວຽນທຶນ ແລະ ແຮງງານກ້ານະກອນຢ່າງເສລີ. ສ້ໍາລັບການຄ້າ ລ່ະຫວ່າງບັນດາປະເທດ "ຕະຫລາດຮ່ວມເອີລົບ" ແລະ ປະເທດອື່ນໆນັ້ນ ໄດ້ວາງກ້ານົດອັດຕາພາສີເອກະພາບກັນຂ້ຶນ ເພ່ືອສະກັດກັ້ນສິນຄ້າຈາກສະຫະລັດອ່າເມລິກາ ແລະ ປະເທດອື່ນໆບ່ໍ້ໃຫ້ເຂ້ົ້າໄປໃນຂົງເຂດຕະຫລາດຮ່ວມນ້ ີ. ສ່ິງດ່ັງກ່າວນ ີ້ ໄດ້ຢັ້ງຢືນໃຫ້ເຫັນເຖ່ິງການຕ່ໍ້ສູ້ຊ່ວງຊ້ ິງກັນຢ່າງຮຸນແຮງລ ະຫວ່າງພັນທະພາບທາງດ້ານເສດຖະກິດຂອງບັນດາປະເທດທຶນນິຍົມ.

ການເຕ້ົາໂຮມການຜູກຂາດສ້ໍາກຶນແຫ່ງລັດ ຢູ່ໃນຂ້ັນລະດັບໃດໜ ຶ່ງ ສ່ າມາດຂະຫຍາຍກ້ໍາລັງການຜະລິດໄດ້ ແຕ່ໃນເວລາດຽວກັນກ ໍ່ພາໃຫ້ເກ ິດມ ີ ຂ ໍ້ ອ ່ ານ ຂ ໍ ້ ດ ີ ຂ ອ ງ ລ ະ ບ ອ ບ ທ ຶ ນ ນ ິ ຍ ົ ມ ຜ ູ ກ ຂ າ ດ ແ ຫ ່ ງ ລ ັ ດ ແ ມ ່ ນ ກ ານ ສ ິ ບ ຕ ໍ ່ ເ ພ ່ ິ ມ ທ ະ ວ ິ ກ ານ ກ ິ ດ ຂ ີ ້ ຊ ູ ດ ຣ ິ ດ ຊ ຶ ມ ຊ ັ ້ ນ ກ ໍ ່ ມ ະ ກ ອ ມ . ໂ ດ ຍ ອ ົ ງ ໃ ສ ່ ກ ົ ງ ຈ ັ ກ ອ ໍ ່ ານ ວ ຍ ການ ຜ ູ ກ ຂ າ ດ ໄ ດ ້ ເ ພ ່ ິ ມ ທ ະ ວ ິ ກ ານ ກ ິ ດ ຂ ີ ້ ຊ ູ ດ ຣ ິ ດ ຊ ຶ ມ ຊ ັ ້ ນ ກ ໍ ່ ມ ະ ກ ອ ມ ຢ ່ າ ງ ຫ ນ ັ ກ ຫ ນ ່ ວ ງ ດ ້ ວ ຍ ວ ິ ທ ີ ການ ເ ກ ັ ບ ສ ່ ວ ຍ ແ ລ ະ ອ ັ ດ ລ າ ຄ າ ສ ິ ນ ຄ ້ າ . ສ ່ ິ ງ ທ ັ ້ ງ ຫ ມ ົ ດ ນ ີ ້ ໄ ດ ້ ເ ຮ ັ ດ ໃ ຫ ້ ເ ກ ິ ດ ມ ີ ຂ ໍ ້ ຂ ັ ດ ແ ຍ ້ ງ ຢ ່ າ ງ ຮ ້ າ ຍ ແ ຮ ງ ລ ະ ຫ ວ ່ າ ງ ແ ຮ ງ ງ ານ ແ ລ ະ ທ ຶ ນ .

ໃນລະຫວ່າງການຂະຫຍາຍຕົວຂອງລະບອບທຶນນິຍົມຜູກຂາດແຫ່ງລັດນ ີ້ ໄ ດ ້

ປະກົດມີທັງຂໍ້ຂັດແຍ່ງອັນໃຫມ່ຂຶ້ນອີກ ລະຫວ່າງຮູບລັກສະນະສັງຄົມຂອງ ການ ຜະລິດສະໄຫມໃຫມ່ ແລະ ຮູບລັກສະນະການໄກ່ເກ່ຍການຜະລິດສະໄຫມໃຫມ່ ຂອງການຜູກຂາດແຫ່ງລັດ.

ພ້ອມດຽວກັນນີ້ ລະບອບທຶນນິຍົມຜູກຂາດແຫ່ງລັດ ທີ່ມີລະດັບສູງໃນການ-ຫັນການຜະລິດເປັນຂອງສັງຄົມຢູ່ໃນຍຸກສະໄຫມລະບອບທຶນນິຍົມນີ້ ກໍຍັງ ເປັນ ການກະກຽມທາງດ້ານວັດຖຸຢ່າງຄົບຖ້ວນທີ່ສຸດ ເພື່ອກ້າວເຂົ້າສູ່ລະບອບສັງຄົມ ນິຍົມ ແລະ ແມ່ນການເລີ່ມຕົ້ນແຫ່ງລະບອບສັງຄົມນິຍົມ. ແຕ່ວ່າເພື່ອ ຂ້ານ ຜ່ານໄປສູ່ລະບອບສັງຄົມນິຍົມນັ້ນ ອຳນາດຈະຕ້ອງຕົກໄປສູ່ກຳມືຂອງຊົນຊັ້ນກຳ ມະກອນ ຊຶ່ງມີສຳພັນທະພາບລວມກັບຊາວໄຮ່ນາແລະຊາວຜູ້ອອກແຮງງານອື່ນ ອື່ນເສຍກ່ອນ. ລະບອບທຶນນິຍົມຜູກຂາດແຫ່ງລັດ ໄດ້ຂະຫຍາຍຕົວແບບ ບໍ່ກຳ້ ເກີ່ງກັນຢູ່ໃນບາງປະເທດ ແລະ ບາງຂະແຫນງການຜະລິດໃນແຕ່ລະຊ່ວງໄລ ຍະຕ່າງໆ. ເຊັ່ນ, ສົງຄາມໂລກ ແລະ ວິກິດການທາງດ້ານເສດຖະກິດຕ່າງ ຕ່າງ, ລະບອບຊຸນເສີກ ແລະ ຄວາມຫລົ້ມເຫລວທາງດ້ານການເມືອງ ໄດ້ ເຮັດໃຫ້ລະບອບທຶນນິຍົມຜູກຂາດໄດ້ກ້າວຂຶ້ນເປັນລະບອບທຶນນິຍົມຜູກຂາດແຫ່ງ ລັດ.

ພວກນັກສັງຄົມນິຍົມອຽງຂວາ ແລະ ພວກລັດທິແກ້ ໄດ້ພາກັນຢັ້ງຢືນ ວ່າ ລະບອບທຶນນິຍົມຜູກຂາດແຫ່ງລັດ ໄດ້ຫັນປ່ຽນທາດແທ້ຂອງລະບອບຈັກກະພັດນິ ຍົມແລ້ວ. ພວກເຂົາເຈົ້າຍັງໄດ້ຢັ້ງຢືນອີກວ່າ ລັດໄດ້ກາຍເປັນກຳລັງຕັດສິນຢູ່ ໃນເສດຖະກິດຂອງປະເທດທຶນນິຍົມ ແລະ ສາມາດຮັບປະກັນການນຳພາເສດ ຖະກິດຢ່າງມີແຜນການໄດ້ ເພື່ອສິດຜົນປະໂຫຍດຂອງສັງຄົມທັງຫມົດແລະອື່ນໆ. ແຕ່ວ່າເຫດການຕົວຈິງໄດ້ຫັກລ້າງຄວາມຢັ້ງຢືນເຫລົ່ານີ້.

ລະບອບທຶນນິຍົມຜູກຂາດແຫ່ງລັດ ບໍ່ໄດ້ປ່ຽນແປງທາດແທ້ຂອງລະບອບຈັກ ກະພັດນິຍົມແຕ່ຢ່າງໃດເລີຍ. ມັນບໍ່ພຽງແຕ່ບໍ່ສາມາດຈະຫລຸດຜ່ອນ ຂໍ້ຂັດແຍ່ງ ລະຫວ່າງຊົນຊັ້ນຕ່າງໆໃນລະບົບການຜະລິດສັງຄົມທຶນນິຍົມລົງໄດ້ເທົ່ານັ້ນ ແຕ່ ຍັງເຮັດໃຫ້ເກີດມີການສູ້ດັນກັນຢ່າງຮຸນແຮງ ລະຫວ່າງແຮງງານ ແລະທຶນ , ລະຫວ່າງປະຊາຊົນສ່ວນໃຫຍ່ ແລະ ພວກນາຍທຶນຜູກຂາດນຳອີກ. ການ ໄກ່ ເກ່ຍເສດຖະກິດແຫ່ງລັດທຶນນິຍົມ ບໍ່ສາມາດລົບລ້າງການຊ່ວງເສັງກັນ ແລະ ການຜະລິດກະແຈກກະຈາຍ, ບໍ່ສາມາດຮັບປະກັນການຂະຫຍາຍຕົວຂອງເສດ

ຖະກິດຢ່າງມີແຜນການໄດ້ ຢູ່ໃນສັງຄົມທັງຫມົດ ຍ້ອນວ່າພື້ນຖານການ ຜະລິດ ຍັງແມ່ນກຳມະສິດທຶນນິຍົມ ແລະ ມີການກົດຂີ່ຂູດຮີດແຮງງານຮັບຈ້າງຢູ່ ຊັ່ນ ເດີມ.

ທິດສະດີທຶນນິຍົມຕ່າງໆ ວ່າດ້ວຍຄວາມອາດສາມາດ ມີລະບອບທຶນນິຍົມ "ປາສະຈາກວິກິດການ" ແລະ "ຢ່າງມີແຜນການ" ນັ້ນເຫັນວ່າ ບໍ່ກົງກັບ ຄວາມເປັນຈິງແຫ່ງການຂະຫຍາຍຕົວຂອງເສດຖະກິດທຶນນິຍົມສະໄຫມປະຈຸບັນ ເລີຍ.

ຢູ່ໃນປະເທດກຳລັງພັດທະນາຕ່າງໆ ທີ່ກ້າວເດີນຕາມເສັ້ນທາງຂະຫຍາຍ ຕົວເປັນເຈົ້າຕົນເອງນັ້ນ ລັດກໍໄດ້ດຳເນີນມາດຕະການຫລາຍໆຢ່າງໃນ ຂົງ ເຂດເສດຖະກິດ, ກໍ່ສ້າງໂຮງຈັກໂຮງງານຂະຫນາດໃຫຍ່, ເອົາໃຈໃສ່ເປັນ ພິເສດຕໍ່ການເສີມຂະຫຍາຍອຸດສາຫະກຳຫນັກ. ແຕ່ວ່າຢູ່ໃນທີ່ນີ້ ບໍ່ແມ່ນ ການ ຂະຫຍາຍຕົວຂອງລະບອບທຶນນິຍົມຜູກຂາດແຫ່ງລັດ ແຕ່ຫາກແມ່ນລະບອບທຶນນິ ຍົມແຫ່ງລັດ.

ຢູ່ໃນປະເທດກຳລັງພັດທະນາຕ່າງໆນັ້ນ <u>ລະບອບທຶນນິຍົມແຫ່ງລັດ</u> ແມ່ນ ປັດໄຈອັນສຳຄັນແຫ່ງການເຂົ້າປະກອບສ່ວນຢ່າງຕັ້ງຫນ້າຂອງລັດ ຢູ່ໃນ ເສດ ຖະກິດ ແລະ ເປັນອາວຸດຢ່າງຫນຶ່ງ ເພື່ອດັດສ້າງໂຄງປະກອບເສດຖະກິດ ທີ່ ຕົກ ທອດມາແຕ່ຄາວສະໄຫມຕົກເປັນຫົວເມືອງຂຶ້ນ. ຖ້າວ່າລັດຫາກດຳເນີນ-ລະບອບປະຊາທິປະໄຕກ້າວຫນ້າແລ້ວ ເມື່ອນັ້ນ ລະບອບທຶນນິຍົມແຫ່ງລັດ ຈະ ກາຍເປັນປັດໄຈອັນສຳຄັນ ໃນການຕໍ່ສູ້ກັບເງິນທຶນຕ່າງດ້າວ, ຍົກເລີກ ຮາກ ຖານເຈົ້າການທາງດ້ານເສດຖະກິດຂອງເງິນທຶນດັ່ງກ່າວ, ຮັດແຫນ້ນແລະຜັນ ຂະຫຍາຍເສດຖະກິດແຫ່ງຊາດ ແລະ ສ້າງຂໍ້ສະດວກທາງດ້ານເສດຖະກິດ - ເພື່ອກ້າວຂຶ້ນສູ່ເສັ້ນທາງຂະຫຍາຍຕົວແບບບໍ່ແມ່ນທຶນນິຍົມ.

๔. ການເພີ່ມທະວີການຂະຫຍາຍຕົວທີ່ບໍ່ກໍ່ເກີງກັນແຫ່ງລະບອບທຶນນິຍົມ ແລະ ຂໍ້ຂັດແຍ່ງອັນຮຸນແຮງຂອງລະບອບທຶນນິຍົມ

ການປະຕິວັດວິທະຍາສາດ-ເຕັກນິກ ແລະ ຂໍ້ຂັດແຍ່ງອັນຮຸນແຮງ ຂອງ ການຜະລິດສຳ ແບບທຶນນິຍົມ

ການປະຕິວັດວິທະຍາສາດ - ເຕັກນິກສະໄໝໃໝ່ໆ, ເຮັດ ໃຫ້ມີການຫັນປ່ຽນການ ຜະລິດ ດວຍເຄື່ອງກົນຈັກໄປສູ່ການຜະ ລິດແບບອັດຕະໂນມັດນັ້ນ ແມ່ນໄດ້ອີງໃສ່ການບຸກເບີກທາງດ້ານວິທະຍາສາດ-ມາແລ້ວ ແຕ່ຕອນທ້າຍສະຕະວັດທີ ๑๗ ຕົ້ນສະຕະວັດທີ ๘๐. ການໝູນໃຊ້ໜຸ່ມກ໋ຳແຫ່ງການປະຕິວັດວິທະຍາສາດ ແລະ ເຕັກນິກໄດ້ນຳໄປ ສູ່ການຫັນ ປ່ຽນກຳລັງການຜະລິດຂອງສັງຄົມ ແລະ ໄດ້ສ້າງຄວາມອາດສາມາດ ຢ່າງ ຫລວງຫລາຍໃຫ້ແກ່ການຍົກລະດັບກ່ຳນຜະລິດໃຫ້ສູງຂຶ້ນ. ແຕ່ວ່າ ຄວາມອາດ ສາມາດໃນການຍົກລະດັບການຜະລິດໃຫ້ສູງຂຶ້ນທີ່ໄດ້ມາຈາກການປະຕິວັດວິທະ ຍາສາດ-ເຕັກນິກນັ້ນ ແມ່ນເປັນປໍລະປັກກັນກັບການພົວພັນແຫ່ງການຜະລິດທຶນ ນິຍົມ, ກັບການຍາດຊິງເອົາກຳໄລ, ກັບການຜູ້ເພີ່ມທະວີກຳໄລຜູກຂາດ ແລະ ແໜ່ງການພະລັງງານ, ການອົນສິ້ງ, ການສິ້ນສານ ໄດ້ຂະຫຍາຍຕົວຢ່າງ - ວ່ອງໄວທີ່ສຸດ. ການຜະລິດພະລັງງານໄຟຟ້າ, ຈຳນວນສະຖານີໄຟຟ້າປະລະ ມານູ ກໍໄດ້ເພີ່ມຂຶ້ນຢ່າງວ່ອງໄວເຊັ່ນດຽວກັນ. ອຸດສາຫະກຳເອເລັກໂຕຣນິກ ແລະ ເຄມີກໍໄດ້ຮັບການຂະຫຍາຍຕົວໃນຈັງຫວະສູງ. ກະສິກຳກໍ່ຖືກ ຫັນປ່ຽນ ການຮັດແໜ້ນການຄອບຄອງຂອງພວກນາຍທຶນຜູກຂາດ.

ການປະຕິວັດວິທະຍາສາດ-ເຕັກນິກ ໄດ້ຮັດໃຫ້ເກີດມີການປ່ຽນແປງ - ໂຄງປະກອບຢ່າງໃຫຍ່ຫລວງ ຢູ່ໃນເສດຖະກິດທຶນນິຍົມ. ຢູ່ໃນຂົງເຂດ ການ ຜະລິດ ທາງດ້ານວັດຖຸນັ້ນ ຂະແໜງການອຸດສາຫະກຳໃໝ່ໆແລະລວມທັ້ງຂະ ເປັນແບບອຸດສາຫະກຳຊຶ່ງເປັນເຫດໃຫ້ຈຳນວນຄົນທີ່ສັງກັດຢູ່ໃນກະສິກຳໄດ້ຫຼຸດ ຜ່ອນລົງ. ຢູ່ໃນເສດຖະກິດແຫ່ງຊາດ ອັດຕາສ່ວນຂະແໜງການທີ່ບໍ່ລັກສະ-ນະຜະລິດກໍ່ເພີ່ມທະວີສູງຂຶ້ນ ຊຶ່ງປະກອບມີການຄ້າ, ທຸລະກິດທະນາຄານແລະ ການປະກັນໄພ, ກິ່ງຈັກລັດ, ຂະແໜງບໍລິການຕ່າງໆ, ການສຶກສາ, ສາ ທາລະນະສຸກ ແລະ ອື່ນໆ. ການເພີ່ມຂຶ້ນສູງທາງດ້ານຂົງເຂດທີ່ບໍ່ລັກສະນະ ຜະລິດຢ່າງເດັດຖານ ແລະ ການເພີ່ມທະວີອັດຕາສ່ວນຂອງຂົງເຂດດັ່ງກ່າວ-ເຂົ້າຢູ່ໃນເສດຖະກິດນັ້ນ, ດ້ານໜຶ່ງ, ແມ່ນມາຈາກສະມັດຖະພາບແຮງງານ

ຢູ່ໃນຂະແຫນງການຜະລິດບ່ອນທີ່ເອົາເຄື່ອງກົນຈັກເຂົ້າແທນແຮງງານຄົນ ນັ້ນ ໄດ້ເພີ່ມທະວີຂຶ້ນຢ່າງຫລວງຫລາຍ ແລະ ອີກດ້ານຫນຶ່ງ ໄດ້ມາຈາກການ ຂະຫຍາຍກວ້າງ ແລະ ການຂະຫຍາຍຕົວທາງດ້ານການຄ້າ, ຂົງເຂດການບໍລິການ, ການໂຄສະນາສິນຄ້າ, ການສຶກສາ ແລະ ສາທາລະນະສກ.ທັງຫມົດ ນີ້ກໍຍ້ອນວ່າຢູ່ໃນເງື່ອນໄຂຂອງການປະຕິວັດວິທະຍາສາດ-ເຕັກນິກ ເພື່ອ ຂະຫຍາຍການຜະລິດສາໍນັ້ນ ແມ່ນມີຄວາມຮຽກຮ້ອງຕ້ອງການຫລາຍທີ່ສຸດໃນແຮງ ງານກາໍມະກອນທີ່ມີລະດັບວິຊາສະເພາະ ແລະ ໃນການເສີມຂະຫຍາຍ ວຽກ ງານຄົ້ນຄວ້າທາງດ້ານວິທະຍາການ.

ການເຕີບໃຫຍ່ຂະຫຍາຍຕົວຂອງຂະແຫນງເສດຖະກິດຕ່າງໆ ແບບບໍ່ ກາໍ້ ເກົ່ງກັນນັ້ນ ໄດ້ສ້າງບັນຫາໃຫ້ແກ່ການຈາໍຫນ່າຍຍອດປະລິມານ ການຜະລິດ ແລະ ເພີ່ມທະວີການຕໍ່ສູ້ຊ່ວງເສັງກັນຂຶ້ນບໍ່ພຽງແຕ່ຢູ່ໃນທ້ອງຕະຫລາດພາຍໃນ ປະເທດເທົ່ານັ້ນ ແຕ່ລວມທັງຕະຫລາດໂລກທຶນນິຍົມນາໍອີກ ແລະ ສ້າງອຸປະ-ສັກໃຫ້ແກ່ການນາໍໃຊ້ສະມັດຖະພາບການຜະລິດໄດ້ຢ່າງເຕັມສ່ວນ. ບໍ່ແມ່ນແຕ່ ໃນຊ່ວງໄລຍະການຜະລິດໄດ້ຖືບຕົວສູງຂຶ້ນນັ້ນ ສະມັດຖະພາບການຜະລິດ ຈະ ຖືກນາໍໃຊ້ໄດ້ຂະຫນາດ ຜ້ານກາງ ກ૫-ກ૭%, ສ່ວນໃນຊ່ວງໄລຍະອື່ນໆແລະ ໃນບາງຂະແຫນງການຜະລິດ ກໍເຊັ່ນດຽວກັນ-૪૦-૫૦%.

ທ່າອຽງໄປສູ່ການນາໍໃຊ້ສະມັດຖະພາບການຜະລິດຢ່າງບໍ່ເຕັມສ່ວນ ແລະ ໄພຫວ່າງງານຊາໍເຮື້ອທີ່ເກີດຂຶ້ນຈາກສະພາບວິກິດການຮອບດ້ານ ແຫ່ງ ລະ ບອບທຶນນິຍົມນັ້ນ ໄດ້ຢັ້ງຢືນໃຫ້ເຫັນເຖິງການລົ້ມເຫລວຂອງຂະບວນການ ຜະ ລິດສາໍແບບທຶນນິຍົມ, ເຖິງການເປື່ອຍເຍື່ອຍແລະລັດທິກາຝາກຂອງ ລະບອບ ທຶນນິຍົມສະໄຫມໃຫມ່.

ການເພີ່ມທະວີຄວາມຫຍຸ້ງຍາກໃນການຈາໍຫນ່າຍສິນຄ້າ ໄດ້ເຮັດໃຫ້ຂໍ້ຂັດ ແຍ່ງລະຫວ່າງການຜະລິດ ແລະ ການຊົມໃຊ້ຮຸນແຮງຂຶ້ນ, ເພາະສະນັ້ນ ຈົ່ງ ມີຄວາມຈາໍເປັນຕ້ອງຂາຍສິນຄ້າຊົມໃຊ້ສາໍລັບໄລຍະຍາວນານໃຫ້ແກ່ປະຊາຊົນ ເປັນເງິນສິນເຊື່ອ. ໃນປະຈຸບັນນີ້ ຢູ່ຕາມປະເທດທຶນນິຍົມຕ່າງໆ ຖ້າ ປາສະ ຈາກການຈາໍຫນ່າຍຜະລິດຕະພັນ ສັງຄົມສ່ວນໃຫຍ່ດ້ວຍເງິນສິນເຊື່ອແລ້ວ ກໍ ເຫັນວ່າມີຄວາມຫຍຸ້ງຍາກ ແລະ ເປັນໄປບໍ່ໄດ້ເສຍແລ້ວ.

ເພື່ອຜ່ອນຄາຍບັນຫາໃນການຈາໍຫນ່າຍ ສິນຄ້າຂອງບໍລິສັດຜູກຂາດຕ່າງໆ ນັ້ນ ລັດໄດ້ທາໍການເກັບຊື້ ແລະ ສັ່ງຈອງຜົນຜະລິດຂອງພວກເຂົາເຈົ້າ ໂດຍ

ສະເພາະຢ່າງຍິ່ງ ແມ່ນສິນຄ້າເພື່ອທາງການທະຫານ. ການເພີ່ມຂຶ້ນ ທາງດ້ານການຊົນໃຊ້ແຫ່ງລັດ ໄດ້ຊ່ວຍໃຫ້ຕະຫລາດມີສະພາບດີຂຶ້ນແຕ່ເປັນລັກສະ-ນະຊົ່ວຄາວ. ແຕ່ໃນເວລາດຽວກັນ ການເພີ່ມທະວີການຊ່ວງເສັງປະກອບອາວຸດໄດ້ເຮັດໃຫ້ຊາວຜູ້ອອກແຮງງານ ຕ້ອງໄດ້ແບກຫາບພາລະຢ່າງຫນັກຫນ່ວງຕໍ່ການເສຍສ່ວຍ ຍ້ອນວ່າການໃຊ້ຈ່າຍສຳລັບການຜະລິດ ພາຫະນະສົງຄາມ-ນັ້ນ ຖືກຖົມດ້ວຍເງິນເສຍສ່ວຍຂອງປະຊາຊົນ ແລະ ເງິນກູ້ລັດ.

ຜົນສະທ້ອນຈາກການປະຕິວັດວິທະຍາສາດ-ເຕັກນິກ ທີ່ມີຕໍ່ສັງຄົມທຶນນິຍົມ ມີລັກສະນະຂັດກັນ. ລະບອບທຶນນິຍົມບໍ່ສາມາດນຳໃຊ້ຜົນສຳເລັດທາງດ້ານ ວິ-ທະຍາສາດ-ເຕັກນິກສະໄຫມໃຫມ່ ເພື່ອແກ້ໄຂບັນຫາສັງຄົມທີ່ສຸກງອມນັ້ນ ໄດ້ເລີຍ. ຢູ່ໃນບັນດາປະເທດທຶນນິຍົມ ການນຳໃຊ້ເຕັກນິກທັນສະໄຫມ ໄດ້ເຮັດ-ໃຫ້ເກີດມີຜົນສະທ້ອນທາງສັງຄົມຂຶ້ນເຊັ່ນ ໄພຫວ່າງງານກໍເພີ່ມສູງຂຶ້ນ, ເພີ່ມ-ທະວີແຮງງານສຸມ, ພວກກຸ່ມການເງິນກໍນັບມື້ນັບເຕົ້າໂຮມຄວາມອຸດົມຮັ່ງ ມີ-ຢ່າງຫລວງຫລາຍໄວ້ໃນກຳມືຂອງຕົນ. ລະບອບສັງຄົມທີ່ສ້າງເງື່ອນໄຂສຳລັບ-ການນຳໃຊ້ຜົນສຳເລັ່ດແຫ່ງການປະຕິວັດວິທະຍາສາດ-ເຕັກນິກ ເພື່ອສິດຜົນ-ປະໂຫຍດຂອງຊາວຜູ້ອອກແຮງງານທັງຫມົດນັ້ນ ແມ່ນລະບອບສັງຄົມນິຍົມ.

ຂໍ້ຂັດແຍ່ງອັນເລິກເຊິ່ງ ລະຫວ່າງ ພວກນາຍທຶນຜູກຂາດ ແລະສິດຜົນ ປະໂຫຍດຂອງມວນຊົນ ທັງຫມົດ ໃນກາງສະຕະວັດທີ ๘๐ ໄດ້ມີ ການສືບຕໍ່ແບ່ງແຍກຢູ່ພາຍໃນ-ຊົນຊັ້ນປົກຄອງຄືຊົນຊັ້ນ ນາຍ ທຶນ. ໃນເວລາດຽວກັນຄວາມ ເຂັ້ມແຂງແລະອິດທິພົນຂອງ ພວກນາຍທຶນຜູກຂາດ ແລະ ພວກມະຫາ ອຳ-ນາດຈັກກະພັດກໍເພີ່ມສູງຂຶ້ນ.

ອີກຊຶກສ່ວນຫນຶ່ງ ຢູ່ໃນລະບອບສັງຄົມທຶນນິຍົມນັ້ນ ແມ່ນມີຂະບວນຊາວ ຜູ້-ອອກແຮງງານຮັບຈ້າງ ແລະ ໃນນັ້ນຈຳນວນຫລວງຫລາຍແມ່ນຊາວກຳມາຊີບ. ໃນກາງສະຕະວັດທີ ๘๐ ອັດຕາສ່ວນຂອງຊາວຜູ້ອອກແຮງງານຮັບຈ້າງ ຢູ່ໃນ-ບັນດາປະເທດທຶນນິຍົມຕ່າງໆ ປະກອບມີ ກ๐-ຜ๐% ໃນຈຳນວນປະຊາຊົນ ຜູ້-ອອກແຮງງານທັງຫມົດ, ແລະ ປະມານ ๑/ມ ຂອງຈຳນວນປະຊາຊົນຜູ້ອອກ-ແຮງງານຢູ່ໃນບັນດາປະເທດກຳລັງພັດທະນາອາຊີ, ອາຟະລິກາ ແລະ ອາ

ເມລິກາລາຕິນ.

ພາກສ່ວນສຳຄັນຂອງຂະບວນຊາວຜູ້ອອກແຮງງານຮັບຈ້າງ ແມ່ນ ຊົນຊັ້ນ ກຳມະກອນທີ່ເປັນກອນກຳລັງຫັນປ່ຽນໂລກໂດຍປະຕິວັດ ແລະ ເປັນກຳລັງນຳ ໜ້າແຫ່ງຄວາມກ້າວໜ້າຂອງສັງຄົມ. ຢູ່ໃນພາກສ່ວນຊົນຊັ້ນກຳມະກອນນັ້ນຈຳ ນວນ ແລະ ອັດຕາສ່ວນຂອງຊາວກຳມາຊີບອຸດສາຫະກຳພາຍໃນຕົວເມືອງ ກໍ ເພີ່ມສູງຂຶ້ນ ແລະ ໃນເວລາດຽວກັນ ອັດຕາສ່ວນຂອງຊາວກຳມາຊີບກະສິກຳ ກໍຫລຸດຕ່ຳລົງ. ອັດຕາສ່ວນຂອງຊາວກຳມະກອນທີ່ມີລະດັບວິຊາສະເພາະ ກໍ ເພີ່ມສູງຂຶ້ນເປັນຈຳນວນຫລວງຫລາຍ. ຊົນຊັ້ນກຳມະກອນກໍມີບົດບາດອັນ ສຳ ຄັນທາງດ້ານການເມືອງ-ສັງຄົມ ແລະ ຍົກສູງສະຕິຕື່ນຕົວດ້ານແນວຄິດ ແລະ ການຈັດຕັ້ງ. ຊົນຊັ້ນກຳມະກອນໄດ້ເສີມຂະຫຍາຍ ແລະ ຮັດແໜ້ນສາຍ ພົວ ພັນກັນ ເປັນຢ່າງດີ ກັບຂະບວນຊາວຜູ້ອອກແຮງງານຕ່າງໆເຊັ່ນ ຊາວໄຮ່ນາ, ນາຍຊ່າງຫັດຖະກຳ, ພະນັກງານ, ປັນຍາຊົນ ແລະ ອື່ນໆ.

ການນຳໃຊ້ໜາກຜົນແຫ່ງຄວາມກ້າວໜ້າທາງດ້ານວິທະຍາສາດ- ເຕັກ ນິກໂດຍພວກນາຍທຶນຜູກຂາດ ເພື່ອສິດຜົນປະໂຫຍດຂອງຕົນນັ້ນ ໄດ້ຮັດ ໃຫ້ ເພີ່ມທະວີການຕໍ່ຂູດຮີດຊາວຜູ້ອອກແຮງງານຢ່າງໜັກໜ່ວງ. ແຮງງານ ສຸ່ມ, ອຸປະຕິເຫດໃນຂ່ວງໄລຍະການຜະລິດ, ລາຄາສິນຄ້າ ແລະ ການເສຍ ສ້ອຍ, ໄພເງິນເຟ້ໄດ້ເພີ່ມສູງຂຶ້ນຢ່າງລຽນຕໍ່. ສະພາບການເປັນຢູ່ ທາງ ດ້ານວັດຖຸຂອງຊາວຜູ້ອອກແຮງງານກໍ່ບໍ່ມີຄວາມໝັ້ນຄົງຫຍັງເລີຍ.

ນອກຈາກນີ້ ສະພາບການເປັນຢູ່ ຂອງຊົນຄົນຂະໜາດປານກາງ ຢູ່ໃນ- ບັນດາປະເທດທຶນນິຍົມ ຊຶ່ງລວມມີນາຍທຶນນ້ອຍ, ນັກທຸຣະກິດ, ພະນັກງານກໍ ເກີດມີການປ່ຽນແປງເຊັ່ນດຽວກັນ. ຈາກການຂະຫຍາຍຕົວຂອງລະບອບທຶນນິ ຍົມ ຈຳນວນແລະອັດຕາສ່ວນຂອງພວກນາຍທຶນນ້ອຍ ພາຍໃນຕົວເມືອງ ແລະ ຊົນນະບົດ ກ່ອນອື່ນໝົດ ແມ່ນຊາວໄຮ່ນາ ກໍນັບມື້ນັບຫລຸດໜ້ອຍຖອຍລົງເປັນ ລຳດັບ. ຊາວຜູ້ຜະລິດນ້ອຍ ພາຍໃນຕົວເມືອງແລະຊົນນະບົດ ທີ່ພົບກັບຄວາມ ຫລົ້ມຈົມສ່ວນໃຫຍ່ນັ້ນ ແມ່ນໄດ້ກາຍເປັນຊາວຜູ້ອອກແຮງງານພາຍໃນຕົວ - ເມືອງ ແລະ ກ່ອນອື່ນໝົດ ກໍຄືຊາວກຳມາຊີບ. ສິດຜົນປະໂຫຍດຂອງ ພວກ ນາຍທຶນຜູກຂາດ ບໍ່ພຽງແຕ່ຂັດກັບສິດຜົນປະໂຫຍດຂອງຊົນຊັ້ນກຳມະກອນເທົ່າ ນັ້ນ ແຕ່ຍັງຂັດກັບສິດຜົນປະໂຫຍດຂອງພວກນາຍທຶນນ້ອຍ ແລະ ປານກາງທີ່ບໍ

ມີການຜູກຂາດນຳອີກ. ທຶນຜູກຂາດ ສິ່ງພົນສະທ້ອນໃສ່ນະໂຍບາຍການ ເສຍ
ສ່ວຍ, ເງິນກູ້ຢືມ ແລະ ອັດຕາພາສີຂອງລັດ; ໂດຍໄດ້ວາງລະດັບລາຄາສິນ
ຄ້າຂັ້ນນັ້ນ ພວກນາຍທຶນຜູກຂາດ ກໍສາມາດຍາດ ເອົາສ່ວນແບ່ງຊຸນຄ່າ ສ່ວນ
ເກີນເພື່ອພົນປະໂຫຍດຂອງຕົນ ແລະ ຍາດຊິ່ງເອົາກຳໄລນຳພວກນາຍທຶນ -
ນ້ອຍ ແລະ ປານກາງ ຊຶ່ງພາໃຫ້ພວກເຂົາເຈົ້າໄດ້ພົບກັບການລົ້ມລະລາຍລົງ.
ດ້ວຍເຫດນີ້ເອງ ບໍ່ມີພຽງແຕ່ຊຸນຊັ້ນກຳມະກອນເທົ່ານັ້ນ ທີ່ໃຫ້ ຄວາມສົນໃຈ
ຢ່າງສຸດຊຶ້ງໃນການລົບລ້າງການຄອບຄອງຂອງພວກນາຍທຶນຜູກຂາດ ແຕ່ຍັງມີ
ຊາວໄຮ່ນາ, ພວກນາຍທຶນນ້ອຍ ແລະ ປານກາງພາຍໃນຕົວເມືອງ ແລະຊຸນ
ນະບົດນຳອີກ. ສັດພົນປະໂຫຍດຂອງພວກນາຍທຶນຜູກຂາດ ໄດ້ຂັດກັບສັດພົນ-
ປະໂຫຍດລວມຂອງຊາດຢ່າງຮ້າຍແຮງທີ່ສຸດ.

ຢູ່ໃນໂລງປະກອບສັງຄົມຂອງບັນດາປະເທດທຶນນິຍົມນັ້ນ ຈຳນວນແລະອັດ
ຕາສ່ວນຂອງປັນຍາຊົນ ແລະ ພະນັກງານ ກໍໄດ້ເພີ່ມສູງຂຶ້ນຢ່າງຫລວງຫລາຍ.
ການປະຕິວັດວິທະຍາສາດ-ເຕັກນິກສະໄໝໃໝ ໄດ້ເຮັດໃຫ້ປັນຍາຊົນພົບກັບ
ການພັນແຍກເປັນຊັ້ນຄົນຕ່າງໆ ແລະ ຈຳນວນຫລາຍກໍຖືກກົດຊຶ່ຂູດຮີດ ຢ່າງ
ໜັກໜ່ວງ. ຖ້າເບິ່ງຕາມເງື່ອນໄຂຊີວິດການເປັນຢູ່, ໂລກະທັດ, ສະພາບ
ທາງດ້ານວັດຖຸຂອງພວກເຂົາເຈົ້າແລ້ວ ກໍເຫັນວ່າປັນຍາຊົນຈຳນວນ ຫລວງ
ຫລາຍມີອັນດັບຄຽງກັບຊາວກຳມະກອນຮັບຈ້າງ. ສິ່ງດັ່ງກ່າວນີ້ ໄດ້ສ້າງ -
ເງື່ອນໄຂຢ່າງພາວະວິໄສແກ່ການຮັດແໜ້ນພັນທະພາບລະຫວ່າງຜູ້ທີ່ອອກແຮງ
ງານທາງດ້ານມັນສະໝອງ ແລະ ກຳລັງກາຍ ເພື່ອຈັດຕັ້ງ ການເຄື່ອນໄຫວ
ລວມຕ້ານທຶນຜູກຂາດ.

ພົນປະໂຫຍດຈາກການນຳໃຊ້ກຳລັງການຜະລິດສະໄໝໃໝ່ ແລະໜາກ
ຜົນທາງດ້ານວິທະຍາສາດ-ເຕັກນິກ ໄດ້ຕົກໄປເປັນຂອງຄະນາທິປະໄຕ ການ
ເງິນ.

ການກົດຊຶ່ຂູດຮີດຊາວຜູ້ອອກແຮງງານຢ່າງໜັກໜ່ວງນັ້ນ ໄດ້ເພີ່ມທະວີ-
ການຕໍ່ສູ້ຊຸນຊັ້ນຂຶ້ນ ແລະ ເພີ່ມທະວີການປະທະກັນທາງດ້ານສັງຄົມຂຶ້ນຢ່າງຮຸນ
ແຮງຢູ່ໃນສັງຄົມທຶນນິຍົມ. ຂໍ້ຮຽກຮ້ອງຕ່າງໆ ທາງດ້ານເສດຖະກິດ- ສັງຄົມ
ແລະ ການເມືອງຂອງຊາວຜູ້ອອກແຮງງານທັງຫລາຍ ກໍນັບມື້ນັບຂະຫຍາຍ -
ອອກຢ່າງກ້ວາງຂວາງ ແລະ ການປະທ້ວງຮຽກຮ້ອງຕ່າງໆ ຂອງພວກ ເຂົາ

ເຈົ້າກໍກາຍເປັນລັກສະນະຮູບການທາງດ້ານການເມືອງ. ຈັ້ນຄົນປະເພດຕ່າງ ຕ່າງກໍເຕົ້າໂຮມກັນເຂົ້າ ຮ່ວມບັ້ນຮົບອັນດຽວກັນ ເພື່ອຕ້ານ ພວກຈັກກະພັດ ແລະ ຕ້ານການຜູກຂາດຢ່າງເປັນຂະບວນຟົດເດືອດທີ່ສຸດ. ບົດບາດຂອງກອງ ນຳຫນ້າຢູ່ໃນການຕໍ່ສູ້ດັ່ງກ່າວນີ້ ແມ່ນຂອງພັກກອມມູນິດ ແລະ ພັກກຳມະກອນ ມາກ-ເລນິນ ຊຶ່ງພະຍາຍາມເຕົ້າໂຮມຂະບວນມະຫາຈົນ ຢ່າງກວ້າງຂວາງ ເພື່ອຕ່າວໂຈມຕີຕ້ານລະບອບຈັກກະພັດນິຍົມ, ເພື່ອປົກປັກຮັກສາ ສັນຕິພາບ ແລະ ຄວາມເປັນເອກະລາດແຫ່ງຊາດ.

ບັນດາປະເທດສັງຄົມນິຍົມ ໄດ້ໃຫ້ການສະຫນັບສະຫນູນຮອບດ້ານ ແກ່ຂະ ບວນການປະຕິວັດຂອງຈົນຈັ້ນກຳມະກອນຢູ່ໃນບັນດາປະເທດທຶນນິຍົມຂະຫຍາຍ ຕົວ ແລະ ແກ່ຂະບວນການປົດປ່ອຍຊາດຂອງປະຊາຈົນ ປະເທດອາດີດຫົວ - ເມືອງຂຶ້ນ ແລະ ອະນານິຄົມຕ່າງໆ. ການຕໍ່ສູ້ຂອງກຳລັງທີ່ກ້າວຫນ້າ ຕ້ານ ການຜູກຂາດ ແມ່ນພາກສ່ວນຫນຶ່ງ ທີ່ສຳຄັນ ແລະ ຕັດແຍກອອກບໍ່ໄດ້ ຈາກ ການຕໍ່ສູ້ຕ້ານລະບອບຈັກກະພັດນິຍົມ.

ຂໍ້ຂັດແຍ່ງພື້ນຖານອັນຮຸນແຮງ ຂອງລະບອບທຶນນິຍົມ

ຢູ່ໃນສັງຄົມທຶນນິຍົມ ການຂະຫຍາຍ-ຕົວຂອງການປະຕິວັດວິທະຍາສາດ - ເຕັກນິກ ໄດ້ສືບຕໍ່ບົນການຂັດແຍ່ງອັນ ພື້ນຖານແຫ່ງລະບອບທຶນນິຍົມ ແມ່ນຄວາມຂັດແຍ່ງລະຫວ່າງລັກສະນະ ເປັນ ຂອງສັງຄົມຂອງການຜະລິດ ແລະ ຮູບການທຶນນິຍົມເອກະເທດ ໃນການຍຶດຖື ຫມາກຜົນແຫ່ງການຜະລິດ.

ການປະຕິວັດວິທະຍາສາດ-ເຕັກນິກ ໄດ້ຈຸກຍູ້ການແບ່ງປັນແຮງງານ ສັງ ຄົມ ແລະ ການແບ່ງເຂດຜະລິດທີ່ພົວພັນກັບການແບ່ງປັນແຮງງານໃນ ສັງຄົມ ທັງຢູ່ໃນແຕ່ລະປະເທດກໍຄືຢູ່ຕາມຂົງເຂດສາກົນທັງຫມົດ. ການແບ່ງປັນແຮງ-ງານໃນສັງຄົມ ແລະ ການປັບປຸງການແບ່ງເຂດຜະລິດໄດ້ເພີ່ມທະວີການ ພົວ ພັນແລະອີງອາໄສຊຶ່ງກັນແລະກັນ ບໍ່ພຽງແຕ່ລະຫວ່າງຂະແຫນງການຜະລິດໃດ ຫນຶ່ງ ພາຍໃນປະເທດເທົ່ານັ້ນ ແຕ່ຍັງມີລະຫວ່າງປະເທດ ແລະ ທະວີບຕ່າງ ຕ່າງນຳອີກ. ສິ່ງດັ່ງກ່າວນີ້ ໄດ້ຮຽກຮ້ອງໃຫ້ມີການປະສານສົມທົບກັນຂຶ້ນ ໃນ ການເຄື່ອນໄຫວການຜະລິດຢູ່ໃນຂົງເຂດຊາດ ແລະ ສາກົນ. ແຕ່ໃນເວລາ-

ດຽວກັນ ຮູບການກຳມະສິດສ່ວນຕົວທຶນນິຍົມ ແລະ ຮູບການທຶນນິຍົມ ເອກະ ເທດ ໃນການຍົດຖືຫມາກຜົນແຫ່ງການຜະລິດສັງຄົມ ໄດ້ເປັນອຸປະສັກ ກີດ ຂວາງສົ່ງດ່ຳກ່າວຢ່າງຕັດຂາດບໍ່ໄດ້.

ຂໍ້ຂັດແຍ່ງພື້ນຖານອັນຮຸນແຮງຂອງລະບອບທຶນນິຍົມ ໄດ້ກາຍອອກຈາກ - ຂອບເຂດຊາດ ແລະ ກາຍເປັນລັກສະນະສາກົນ. ການຂະຫຍາຍຕົວຂອງລັກ ສະນະແຫ່ງການຜະລິດຂອງສັງຄົມ ກໍ່ໃຫ້ເກີດມີບັນຫາລວມສຳຄັນຕ່າງໆ ເຊັ່ນ ການນຳໃຊ້ແຫລ່ງພະລັງງານໄຟຟ້າ ແລະ ແຫລ່ງຊັບພະຍາກອນໃຕ້ພື້ນມະຫາ ສະຫມຸດໂລກ, ການບຸກເບີກຫ້ວງອະວະກາດ, ການປົກປັກຮັກສາສິ່ງ ແວດ ລ້ອມທຳມະຊາດ. ແຕ່ວ່າການທັນເສດຖະກິດໄປຫ້ວງການທະຫານ,ການຊ່ວງ ເສັ້ງປະກອບອາວຸດໄດ້ກືນເອົາຫມົດຊັບພະຍາກອນ, ບໍ່ເກີດຕ່າງໆ ຊຶ່ງ ເປັນ ສິ່ງຈຳເປັນໃຫ້ແກ້ການແກ້ໄຂບັນຫາເຫລົ່ານີ້ ກໍ່ຄືບັນຫາອັນໆທີ່ກຳລັງເກີດຂຶ້ນຕໍ່ ຫນ້າມວນມະນຸດ ແລະ ນອກຈາກນີ້ຍັງໄດ້ເຮັດໃຫ້ບັນຫາການຕໍ່ສູ້ເພື່ອສັນຕິ - ພາບ, ບັນຫາຫ້າມປາມການຜະລິດອາວຸດແບບລ້າງຜານ ແລະ ບັນຫາ ອາ ດ້ວຍການທຳລາຍການສະສົມອາວຸດແບບລ້າງຜານດ່ຳກ່າວເຫລົ່ານີ້ ການເປັນ ບັນຫາອັນດັບຫນຶ່ງ.

ກຳລັງການຜະລິດສະໄຫມໃຫມ່ ໄດ້ຂະຫຍາຍຕົວ ລື້ນຂອບເຂດ ການພົວ ພັນແຫ່ງການຜະລິດທຶນນິຍົມແບບລັກສະນະວົງແຄບແລ້ວ ແລະ ກໍ່ກາຍເປັນລັກ ສະນະຂັດກັບການພົວພັນເຫລົ່ານີ້. ສິ່ງດ່ຳກ່າວນີ້ ສະແດງອອກບໍ່ພຽງແຕ່ຢູ່ໃນ ວົງການທາງດ້ານເສດຖະກິດແຫ່ງການຜະລິດລື້ນຕະຫລາດ ອັນເລິກເຊິ່ງ - ແລະ ຕໍ່ເນື່ອງກັນເທົ່ານັ້ນ ແຕ່ຍັງຢູ່ໃນບັນດາປະກົດການຕ່າງໆອີກເຊັ່ນ ວົງການ ທາງດ້ານພະລັງງານໄຟຟ້າ, ເງິນ-ການເງິນ, ສະບຽງອາຫານ, ນິ ເວດວິທະຍາ ຊຶ່ງທັງຫມົດນີ້ໄດ້ເຮັດໃຫ້ໂລກທຶນນິຍົມສັ່ນສະເທືອນໄປຈົນຫມົດ.

ໃນປະຈຸບັນນີ້ ເປັນໄປບໍ່ໄດ້ເສຍແລ້ວ ທີ່ຈະສຶກສາເບິ່ງວົງການ ທາງ ດ້ານເສດຖະກິດແຫ່ງການຜະລິດລື້ນເກີນ ຢູ່ໃນປະເທດທຶນນິຍົມ ໃດຫນຶ່ງ ໂດຍຂາດການຕີລາຄາລວມສະພາບເສດຖະກິດທຶນນິຍົມທັງຫມົດ. ການ ເຕີບ ໃຫຍ່ຂະຫຍາຍຕົວ ແລະ ຄວາມເຂັ້ມແຂງຂອງລະບົບສັງຄົມນິຍົມແຫ່ງໂລກ , ການພັງທະລາຍຂອງລະບົບລ່າຫ້ວເມືອງຂຶ້ນຂອງລະບອບຈັກກະພັດນິຍົມ,ການ ເພີ່ມທະວີການຕໍ່ສູ້ຂອງບັນດາປະເທດທີ່ໄດ້ຮັບການປົດປ່ອຍໃຫມ່ ຕາມລະບອບ

ຈັກກະພັດນິຍົມ ທັງຫມົດນີ້ໄດ້ຢັ້ງຢືນໃຫ້ເຫັນວ່າ ຂໍ້ຂັດແຍ່ງພື້ນຖານຂອງ ລະ ບອບທຶນນິຍົມ ໄດ້ເຕີບໃຫຍ່ຂະຫຍາຍຕົວເກີນກາຍຂອບເຂດຊາດດຽວ ເສຍ ແລ້ວ. ລະບອບທຶນນິຍົມໄດ້ກາຍເປັນອຸປະສັກກີດຂວາງການຂະຫຍາຍຕົວຂອງ ສັງຄົມມະນຸດ.

ການຂະຫຍາຍຕົວທີ່ບໍ່ກຳ້ເກົ່ງກັນ ຂອງ ບັນດາປະເທດທຶນນິຍົມ ແລະການເຕີບ ໃຫຍ່ຂະຫຍາຍຕົວຂອງຂໍ້ຂັດແຍ່ງ ລະ ຫວ່າງພວກເຂົາ

ສົງຄາມໂລກຄັ້ງທີສອງ ໄດ້ ນຳໄປສູ່ການສືບຕໍ່ເພີ່ມທະວີ ການຂະຫຍາຍຕົວທີ່ບໍ່ ກຳ້ ເກົ່ງກັນຂອງບັນດາປະເທດ ທຶນນິຍົມ. ປະເທດເຢຍລະ ມັນຮິດແລ, ຍີ່ປຸ່ນ ແລະ ອິຕາລີ ໄດ້ເສຍໄຊໃນສົງຄາມ ແລະ ເສດຖະກິດ ຂອງປະເທດເຫລົ່ານີ້ ກໍໄດ້ຖືກທຳລາຍຢ່າງຮ້າຍແຮງທີ່ສຸດ. ປະເທດຝະລັ່ງທີ່ ຕົກເປັນປະເທດທີ່ຖືກຍຶດຄອງໃນໄລຍະສົງຄາມໂລກຄັ້ງທີສອງນັ້ນ ກໍໄດ້ປະສົບ ກັບຄວາມເສຍຫາຍຢ່າງຫນັກຫນ່ວງເຊັ່ນດຽວກັນ. ປະເທດອັງກິດ ກໍຊຸດໂຊມ ອ່ອນເພຍລົງຢ່າງຮ້າຍແຮງ. ຜູ້ທີ່ຮັ່ງມີທີ່ສຸດ ໃນປາງສົງຄາມແມ່ນພວກ ນາຍ ທຶນຜູກຂາດອາເມລິກາເທົ່ານັ້ນ. ໃນປີ ຈພ້ຊຊ ອັດຕາສ່ວນການຜະລິດອຸດສາ ຫະກຳຂອງສະຫະລັດອາເມລິກາ ໃນໂລກທຶນນິຍົມທັງຫມົດມີ ຕ້ຊ,ຜ້%, ອັງ ກິດ-ຈ0,ຄ, ສະຫະພັນເຢຍລະມັນ-ສ,ຜ, ຝະລັ່ງ-ຊ,ຜ, ການາດາ-ສ,0 ອິຕາລີ-ຄ ແລະ ຍີ່ປຸ່ນ-ຈ,ຄ%. ໃນໄລຍະຫຼັງມານີ້ ໄດ້ເກີດມີການປ່ຽນແປງ ຢ່າງຫລວງຫລາຍໃນການຊັ່ງຊາກຳລັງແຮງພາຍໃນໂລກທຶນນິຍົມ. ສິ່ງດັ່ງ - ກ່າວນີ້ ມັນສະແດງອອກຢູ່ບ່ອນໃດແທ້ ?

ສະຫະລັດອາເມລິກາ ໄດ້ສູນເສຍສະພາບລື່ນກາຍຢ່າງຂາດຕົວຂອງຕົນຢູ່ ໃນການຜະລິດຂອງໂລກທຶນນິຍົມ ແລະ ການຄ້າ. ຈາກປີ ຈພ້ຊຊ-ຈພຊ0ອັດ ຕາສ່ວນຂອງສະຫະລັດອາເມລິກາຢູ່ໃນການຜະລິດອຸດສາຫະກຳໂລກ ໄດ້ ຕົກ ຕຳ່ລົງເຖິງ ຈກ,ພ% ແລະຕົກເປັນອັດຕາສ່ວນລວມ ສ້ກ,ກ%. ແຕ່ເຖິງຢ່າງ ໃດກໍດີ ສະຫະລັດອາເມລິກາກໍຍັງໄດ້ສືບຕໍ່ເປັນປະເທດມະຫາອຳນາດນຳຫນ້າ ໂລກທຶນນິຍົມຢູ່ເຊັ່ນເດີມ. ສະຫະລັດອາເມລິກາໄດ້ທຸ່ມເທທຶນໃຊ້ຈ່າຍ ຕໍ່ວຽກ ງານຄົ້ນຄວ້າທາງດ້ານວິທະຍາສາດຫລາຍກວ່າບັນດາປະເທດເອີລົບ ຕາເວັນ

ຕົກ ແລະ ລວມທັງຍີ່ປຸ່ນ ๔ ເທື່ອ ແລະ ເປັນເຈົ້າຄອບຄອງ ๗/๑๐ ຂອງ ການສະສົມອາວຸດປະລະມານູ ທີ່ຜະລິດຢູ່ໃນໂລກທຶນນິຍົມ. ສະຫະບໍລິສັດ ຂະ ຫນາດໃຫຍ່ສຸດຂອງໂລກ ๑.๐๐๐ ແຫ່ງໃນນັ້ນ ๕๔ມ ບໍລິສັດ ແມ່ນຕົກ ເປັນ ຂອງສະຫະລັດອາເມລິກາ.

ນອກຈາກນີ້ແລ້ວ ຢູ່ໃນເສດຖະກິດໂລກທຶນນິຍົມ ການເຕີບໃຫຍ່ຂະຫຍາຍ ຕົວທາງດ້ານເສດຖະກິດຂອງບັນດາປະເທດເອີລົບຕາເວັນຕົກ ກໍມີຈັງຫວະ - ການຂະຫຍາຍຕົວສູງເດັ່ນຂຶ້ນກວ່າຢູ່ໃນສະຫະລັດອາເມລິກາຢ່າງເຫັນຊັດແຈ້ງ ທີ່ສຸດ. ເມື່ອເຕົ້າໂຮມກັນເຂົ້າເປັນ "ຕະຫລາດຮ່ວມເອີລົບ" ແລ້ວບັນດາປະ ເທດເຫລົ່ານີ້ນັບມື້ນັບຕ້ານຢັນກັບສະຫະລັດອາເມລິກາ ບໍ່ພຽງແຕ່ທາງ ດ້ານ ເສດຖະກິດເທົ່ານັ້ນ ແຕ່ກໍຍັງລວມທັງທາງດ້ານການເມືອງນຳອີກ.

ປະເທດຍີ່ປຸ່ນ ກໍມີບົດບາດເດັ່ນຂຶ້ນເຊັ່ນດຽວກັນ ຢູ່ໃນເສດຖະກິດທຶນນິຍົມ ແລະເປັນປະເທດທີ່ຮັກສາຈັງຫວະການເຕີບໃຫຍ່ຂອງການຜະລິດອຸດສາຫະກຳ ໄດ້ໃນລະດັບສູງເປັນໄລຍະເວລາທີ່ຍາວນານທີ່ສຸດ. ພວກນາຍທຶນຜູກຂາດ ຍີ່ ປຸ່ນໄດ້ຮັບຜົນສຳເລັດເປັນຢ່າງດີໃນການຊ່ວງເສັງກັບພວກນາຍທຶນຜູກຂາດອາ ເມລິກາ ແລະ ເອີລົບຕາເວັນຕົກຢູ່ໃນທ້ອງຕະຫລາດໂລກ. ການຂະຫຍາຍ- ຕົວ ທາງດ້ານເສດຖະກິດ ທີ່ບໍ່ກຳ້ກົ່ງກັນນັ້ນ ໄດ້ເຮັດໃຫ້ຂໍ້ວິວາດລະຫວ່າງ- ພວກຈັກກະພັດດ້ວຍກັນເພີ່ມທະວີຄວາມຮຸນແຮງຂຶ້ນ.

ປັດໄຈອັນສຳຄັນຂອງຂໍ້ຂັດແຍ່ງອັນເລິກເຊິ່ງ ລະຫວ່າງພວກຈັກກະພັດ - ດ້ວຍກັນໃນໄລຍະປະຈຸບັນນີ້ ແມ່ນການປະຕິວັດວິທະຍາສາດ-ເຕັກນິກ. ການ ຫມູນໃຊ້ຫມາກຜົນແຫ່ງການປະຕິວັດວິທະຍາສາດ-ເຕັກນິກ ໄດ້ເລັ່ງລັດ ການ ປ່ຽນແປງແຫ່ງການຊັ່ງຊາກຳລັງແຮງຢູ່ໃນໂລກທຶນນິຍົມ. ບໍ່ເກີດຂອງການ - ເປັນປໍລະປັກລະຫວ່າງພວກຈັກກະພັດດ້ວຍກັນກໍຍິ່ງເລິກເຊິ່ງຂຶ້ນແລະຂະຫຍາຍ ກວ້າງອອກ.

ໃນປະຈຸບັນນີ້ ສູນກາງການຊ່ວງເສັງກັນ ລະຫວ່າງພວກຈັກກະພັດ ດ້ວຍ ກັນ ແມ່ນສະຫະລັດອາເມລິກາ-ເອີລົບຕາເວັນຕົກ-ຍີ່ປຸ່ນ. ການຂັດແຂ່ງ ຢູ່ ພາຍໃນ "ສາມຫລ່ຽມ"ນີ້ໄດ້ເພີ່ມທະວີຄວາມເຄັ່ງຕຶງຂຶ້ນໃນຮອບດ້ານ ທາງ ດ້ານນະໂຍບາຍການຄ້າ, ເງິນຕາ ແລະ ປາຕັງ ເຕັກນິກ. ຄຽງຄູ່ກັນ ນີ້ ການຂັດແຍ່ງພາຍໃນ ແຕ່ລະສູນກາງຕົ້ນຕໍກໍເຕີບໃຫຍ່ຂຶ້ນຢ່າງລຽນຕົດ.

ການຂັດແຍ່ງລະຫວ່າງພວກຈັກກະພັດດ້ວຍກັນ ແມ່ນມີລັກສະນະເປັນປໍລະ ປັກກັນຢ່າງເອົາເປັນເອົາຕາຍ. ໃນເມື່ອກ່ອນ ອ.ອິ.ເລນິນໄດ້ຊີ້ແຈງ ວ່າ ການຂັດແຍ່ງຢູ່ພາຍໃນຄ່າຍທຶນນິຍົມນັ້ນ ບໍ່ແມ່ນການແຕກແຍກພາຍໃນໂດຍບັງ ເອີນແຕ່ຢ່າງໃດ ມັນແມ່ນ"ການບໍ່ລົງລອຍກັນທີ່ເລິກເຊິ່ງທີ່ສຸດຢ່າງແກ້ບໍ່ຕົກ - ທາງດ້ານສິດຜົນປະໂຫຍດເສດຖະກິດຂອງບັນດາປະເທດຈັກກະພັດ..." ແລະ ທ່ານຍັງຊີ້ແຈງອີກວ່າ ສໍາພັນທະພາບຂອງບັນດາມະຫາອໍານາດຈັກກະພັດ ຄື "...ສໍາພັນທະພາບຂອງພວກປ່າເຖື່ອນ ຊຶ່ງແຕ່ລະຄົນພະຍາຍາມປຸ້ນສະດົມ-ເອົາສິ່ງໃດສິ່ງໜຶ່ງຂອງກັນແລະກັນ"[1]. ຂໍ້ຂັດແຍ່ງລະຫວ່າງພວກຈັກກະພັດ ດ້ວຍກັນເກີດຈາກຂໍ້ຂັດແຍ່ງພື້ນຖານຂອງລະບອບທຶນນິຍົມ ແມ່ນຂໍ້ຂັດແຍ່ງ ລະ ຫວ່າງຮູບລັກສະນະເປັນຂອງສັງຄົມແຫ່ງການຜະລິດ ແລະ ຮູບການທຶນນິຍົມ-ເອກະເທດໃນການຍຶດຖືເອົາໜາກຜົນແຫ່ງການຜະລິດ. ບັນດາສັນຍາ, ຂໍ້ ຕົກລົງການຄ້າ, ຮ່ວມກຸ່ມ, ການອະນຸໂລມກັນຕ່າງໆທັງໝົດນັ້ ບໍ່ສາມາດລົບ ລ້າງຂໍ້ຂັດແຍ່ງຂອງລະບອບຈັກກະພັດນິຍົມລົງໄດ້ເລີຍ.

<u>ຂໍ້ຂັດແຍ່ງອັນຕົ້ນຕໍຂອງຍຸກສະໄໝໃໝ່</u> <u>ແມ່ນການຕໍ່ສູ້ລະຫວ່າງ</u> <u>ລະບອບ ສັງຄົມນິຍົມ</u> <u>ທີ່ເຕີບໃຫຍ່ຂະຫຍາຍຕົວ</u> <u>ແລະ</u> <u>ລະບອບທຶນນິຍົມດັບຊຸບ.</u> ຂໍ້ຂັດ ແຍ່ງດັ່ງກ່າວນີ້ ໄດ້ກະທົບໃສ່ການພົວພັນລະຫວ່າງພວກຈັກກະພັດດ້ວຍກັນ ໃນ ສອງດ້ານ. ດ້ານໜຶ່ງ, ມັນໄດ້ຊຸກຍູ້ໃຫ້ບັນດາປະເທດທຶນນິຍົມເຂົ້າຮ່ວມ ຫຶ ກັນຕາມກັບລະບອບສັງຄົມນິຍົມ, ເປັນພື້ນຖານໃຫ້ແກ່ການສ້າງຕັ້ງກຸ່ມທະຫານ ແລະ ເປັນອຸປະສັກໃຫ້ແກ່ການປະທະກັນທາງກໍາລັງອາວຸດລະຫວ່າງພວກ ຈັກ ກະພັດດ້ວຍກັນ. ອີກດ້ານໜຶ່ງ, ມັນສ້າງບໍ່ເກີດແຫ່ງການຂັດແຍ່ງແລະ ການ ປະທະກັນແບບໃໝ່ລະຫວ່າງປະເທດທຶນນິຍົມຕ່າງໆ ທາງດ້ານບັນຫາ ພື້ນ ຖານແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງໂລກສະໄໝປະຈຸບັນ.

ຢູ່ໃນສະພາບການຕໍ່ສູ້ຕ້ານຢັ້ນກັນຢ່າງຮຸນແຮງລະຫວ່າງສອງລະບົບ ໂລກ ນີ ບັນດາປະເທດມະຫາອໍານາດທຶນນິຍົມ ເຖິງວ່າມີຂໍ້ຂັດແຍ່ງຕ່າງໆລະຫວ່າງ-ພວກເຂົາເຈົ້າກໍຕາມ ແຕ່ເຂົາເຈົ້າກໍພະຍາຍາມເຕົ້າໂຮມກໍາລັງແຮງຂອງຕົນ

---

๑) ອ.ອິ.ເລນິນ. ຜົນນິພົນຄົບຊຸດ, ເຫລັ້ມ ๔๘, ໜ້າ ๗๔; ເຫລັ້ມ๔๑, ໜ້າ ๓๕๐.

ເຂົ້າກັນ ເພື່ອທຳການປົກປ້ອງ ແລະ ຮັດແຫນ້ນລະບອບແຫ່ງການກົດຂີ່ຂູດຮີດ ແລະຮັກສາບົດບາດທີ່ຕັ້ງຂອງຕົນໄວ້ຕໍ່ໄປ.

ການຂັດແຍ່ງລະຫວ່າງພວກຈັກກະພັດດ້ວຍກັນອາດຈະບໍ່ກ້າວໄປເຖິງ ສົງຄາມໂລກໄດ້. ໃນເມື່ອກ່ອນຄືສະໄຫມທີ່ລະບອບທຶນນິຍົມແມ່ນກຳລັງ ປົກຄອງ ຢູ່ໃນໂລກນັ້ນການຂັດແຍ່ງລະຫວ່າງພວກຈັກກະພັດ ແລະ ການຫລຸດລົ້ນກັນໃນ ການຊັ່ງຊາກຳລັງລະຫວ່າງປະເທດຕ່າງໆຈຶ່ງເຮັດໃຫ້ເກີດມີສົງຄາມໂລກຂຶ້ນ. ໃນສູ່ມື້ນີ້ ລະບອບທຶນນິຍົມໄດ້ສູນເສຍຖານະບົດບາດແຫ່ງການເປັນເຈົ້າລະບົບ ຜູ້ດຽວແຫ່ງໂລກແລ້ວ. ປະຈຸບັນນີ້ ແມ່ນລະບົບສັງຄົມນິຍົມໂລກທີ່ເປັນຜົນດີໃຫ້ ແກການເຕີບໃຫຍ່ຂະຫຍາຍຕົວຂອງໂລກ ແລະ ກໍເກີດມີສະພາບການປະຫວັດ ສາດອັນໃຫມ່ຂຶ້ນທີ່ສາມາດເຕົ້າໂຮມເອົາກຳລັງແຮງທັງຫມົດເພື່ອຢັບຢັ້ງກຳລັງ ຮຸກຮານຕ່າງໆ.

* * *

ພວກເຮົາໄດ້ພ້ອມກັນສຶກສາຄົ້ນຄວ້າເບິ່ງແລ້ວ ກ່ຽວກັບແບບວິທີການ ຜະ ລິດທຶນນິຍົມ ທີ່ນອນຢູ່ບົນການກົດຂີ່ຂູດຮີດແຮງງານຮັບຈ້າງ. ຢູ່ໃນສະໄຫມທຶນ ນິຍົມ ໂດຍສະເພາະຢ່າງຍິ່ງແມ່ນຢູ່ໃນໄລຍະທີ່ລະບອບທຶນນິຍົມຂະຫຍາຍຕົວ-ໃນລະດັບສູງນີ້ ຂໍ້ວິວາດທັງຫມົດໄດ້ມີລັກສະນະຂັ້ນແຕກຫັກ ແລະ ກ່ອນອື່ນ - ຫມົດແມ່ນຂໍ້ຂັດແຍ່ງພື້ນຖານລະຫວ່າງຮູບລັກສະນະເປັນຂອງສັງຄົມແຫ່ງ ການ ຜະລິດ ແລະຮູບການທຶນນິຍົມເອກະເທດໃນການຍຶດຖືຫມາກຜົນແຫ່ງການ ຜະ ລິດ. ການຂັດແຍ່ງແບບຂ້ຽວຂາດເຫລົ່ານີ້ ໄດ້ເຮັດໃຫ້ໂລກທຶນນິຍົມກ້າວໄປສູ່ ການຫລົ້ມຈົມທາງດ້ານເສດຖະກິດ ແລະ ສັງຄົມຄັ້ງໃຫມ່ອີກ, ແລະ ຜົນສຸດ-ທ້າຍກໍຈະກ້າວໄປເຖິງບ່ອນຫັນປ່ຽນແບບປະຕິວັດ ກ່ຽວກັບແບບວິທີການຜະລິດ ທຶນນິຍົມເປັນແບບວິທີການຜະລິດສັງຄົມນິຍົມ.

ເຫດການຕົວຈິງໄດ້ຢັ້ງຢືນຄວາມຖືກຕ້ອງຂອງ ກ.ມາກ ທີ່ໄດ້ສະຫລຸບໄວ້ ແລ້ວກ່ອນຫນ້ານີ້ຫລາຍກວ່າຮ້ອຍປີ ວ່າດ້ວຍການແກ້ບໍ່ຕົກຢ່າງເປັນປະຫວັດ - ການແຫ່ງແບບວິທີການຜະລິດທຶນນິຍົມ.

ຄຳຖາມເພື່ອທວນຄືນ

๑. ເນື້ອໃນ ແລະ ພາກວິຖີການຮອບດ້ານແຫ່ງລະບອບທຶນນິຍົມ ມີຫຍັງ ແດ່ ? ວິຖີການຮອບດ້ານແຫ່ງລະບອບທຶນນິຍົມມີຈຸດສຳຄັນອັນໃດແດ?

๘. ການພັງທະລາຍແຫ່ງລະບົບລ່າຕົວເມືອງຂຶ້ນ ຂອງລະບອບຈັກກະພັດນິຍົມ ສະແດງຕົວອອກຄືແນວໃດ ?

๙. ເນື້ອໃນຂອງລັດທິລ່າຕົວເມືອງຂຶ້ນແບບໃໝ່ມີຄຸນຄ່າແນວໃດ ?

๑๐. ຈົ່ງໃຫ້ລາຍລະອຽດກ່ຽວກັບບັນດາພາກສ່ວນເສດຖະກິດ ຢູ່ໃນເສດຖະກິດ ຂອງບັນດາປະເທດທີ່ໄດ້ຮັບການປົດປ່ອຍໃໝ່ ແລະ ສອງເສັ້ນທາງແຫ່ງ ການຂະຫຍາຍຕົວຂອງພວກເຂົາເຈົ້າ.

๑๑. ເນື້ອໃນຂອງການດັດສ້າງເສດຖະກິດ-ສັງຄົມຢູ່ໃນບັນດາປະເທດທີ່ໄດ້ຮັບ ການປົດປ່ອຍໃໝ່ມີຄຸນຄ່າແນວໃດ ?

๑๒. ບົດບາດຂອງບັນດາປະເທດສັງຄົມນິຍົມຢູ່ໃນການຮ່ວມມືກັບບັນດາ ປະ ເທດທີ່ໄດ້ຮັບການປົດປ່ອຍໃໝ່.

๑๓. ເນື້ອໃນຂອງລະບອບທຶນນິຍົມຜູກຂາດແຫ່ງລັດ ແລະ ຮູບການຕ່າງໆແຫ່ງ ການປະກົດຕົວຂອງມັນມີຄຸນຄ່າແນວໃດ ?

๑๔. ການເພີ່ມທະວີຄວາມບໍ່ກ້ຽງກັນ ແລະ ການຂັດແຍ່ງຂອງລະບອບທຶນນິ ຍົມສະແດງຕົວອອກໃຫ້ເຫັນຢູ່ບ່ອນໃດ ? ຈົ່ງໃຫ້ລາຍລະອຽດກ່ຽວກັບ - ການຂະຫຍາຍຕົວທີ່ບໍ່ກ້ຽງກັນ ແລະ ຂໍ້ຂັດແຍ່ງລະຫວ່າງບັນດາ ປະ ເທດທຶນນິຍົມຕ່າງໆໃນສະໄໝປະຈຸບັນ.

ລະບອບສັງຄົມນິຍົມ ແມ່ນຂັ້ນທຳອິດ
ຂອງແບບວິທີການຜະລິດ ກອມມູນິດ

ພາກ ເກົ້າ

ລະບອບສັງຄົມນິຍົມ.
ການກຳເນີດເກີດຂຶ້ນ ແລະການກໍ່ຮ່າງສ້າງຕົວ

ນັບໄດ້ຫລາຍເຊັ່ນຄົນມາແລ້ວ ຊາວຜູ້ອອກແຮງງານ ໃຝ່ຝັນຢາກມີຊີວິດ ອັນເຕັມໄປດ້ວຍຄວາມຜາສຸກ ແລະ ຮັບປະກັນດີ, ພວກເຂົາເຈົ້າຍັງ ໃຝຝັນ ຢາກມີການປົດປ່ອຍຕົນເອງອອກຈາກການຖືກຂູດຮີດ ແຕ່ໃນໄລຍະເວລາ ອັນ ເຫິງນານ ຄົນກໍຍັງບໍ່ຮູ້ຈັກວ່າ ຈະປົດປ່ອຍຕົນເອງດ້ວຍວິທີການໃດ. ມາກ , ອັງແກນ, ເລນິນ ຜູ້ນຳຜູ້ຍິ່ງໃຫຍ່ຂອງຊົນຊັ້ນກຳມະກອນ ໄດ້ຊີ້ຊ່ອງທາງ ໃຫ້ ຊາວຜູ້ອອກແຮງງານເດີນໄປເຖິງອະນາຄົດອັນສະຫວ່າງແຈ້ງ ຂອງມວນມະ-ນຸດນັ້ນຄື ລະບອບກອມມູນິດອັນມີສັງຄົມສັງຄົມນິຍົມເປັນໄລຍະທຳອິດ.

ສັງຄົມນິຍົມປະຕິບັດຫນ້າທີ່ປະຫວັດສາດໃນການປົດປ່ອຍມວນມະນຸດ ໃຫ້ ຫລຸດພົ້ນອອກຈາກຄວາມບໍ່ສະເຫມີພາບທາງສັງຄົມ, ອອກຈາກການກົດຂີ່ ຂົ່ມ ເຫັງແລະການຂູດຮີດໃນທຸກຮູບແບບ, ອອກຈາກໄພພິບັດຂອງສົງຄາມແລະສັງ ຄົມນິຍົມ ກໍ່ໄດ້ນຳເອົາສັນຕິພາບ, ການອອກແຮງງານ, ອິດສະຫລະພາບ , ຄວາມສະເຫມີພາບ, ຄວາມເປັນອ້າຍນ້ອງກັນ ແລະ ຄວາມຜາສຸກມາສູ່ ປະ ຊາຊາດທັງຫມົດ.

ວ.ອີ.ເລນິນ ໄດ້ຂຽນໄວ້ວ່າ: "...ໃນເວລາເລີ່ມຕົ້ນດຳເນີນການດັດ

ສ້າງສັງຄົມນິຍົມ ພວກເຮົາຈະຕ້ອງວາງເປົ້າໝາຍຂອງການດັດສ້າງດັ່ງກ່າວ ນີ້ໃຫ້ຈະແຈ້ງ ຊຶ່ງແມ່ນການກໍ່ສ້າງສັງຄົມກອມມູນິດນັ້ນເອງ..."๑)

ລັດທິມາກ-ເລນິນ ໄດ້ຢັ້ງຢືນຢ່າງມີວິທະຍາສາດວ່າ ຮູບຖານສັງຄົມ - ເສດຖະກິດກອມມູນິດ ທີ່ເຂົ້າມາປ່ຽນທົນນິຍົມນັ້ນ ບໍ່ແມ່ນຈະເກີດຂຶ້ນມາ ເປັນ ແບບສຳເລັດຮູບຄົບຖ້ວນໂລດ. ສັງຄົມບໍ່ສາມາດຈະຂ້າມຜ່ານຈາກທົນນິຍົມໄປ ສູ່ລະບອບກອມມູນິດໄດ້ໂດຍກົງໂລດ. ສັງຄົມຂ້າມຜ່ານຈາກທົນນິຍົມໄປສູ່ສັງຄົມ ນິຍົມ ໂດຍຜ່ານການຕໍ່ສູ້ອັນທໍລະຍົດອົດທົນ ແລະ ມີແຕ່ໃນຂັ້ນຕໍ່ໄປພຸ້ນ ສັງຄົມ ນິຍົມຈຶ່ງຂະຫຍາຍຕົວເຕີບໃຫຍ່ຂຶ້ນເປັນລະບອບກອມມູນິດ.

ການກໍ່ສ້າງສັງຄົມໃໝ່ ຮຽກຮ້ອງໃຫ້ມີໄລຍະເວລາອັນຍາວນານ ແລ່ະ ການອອກແຮງງານຢ່າງເຂັ້ງຮ້ອນຂອງຊົນຊັ້ນກຳມະກອນ, ຊາວນາ, ປັນຍາ ຊົນ ແລະ ໜົດທຸກຄົນ.

ເມື່ອເວົ້າເຖິງຈຸດພິເສດຂອງສອງໄລຍະ ໃນຮູບຖານສັງຄົມ-ເສດຖະກິດ ກອມມູນິດ ກ.ມາກ ຜູ້ປະດິດສ້າງລັດທິກອມມູນິດວິທະຍາສາດ ໄດ້ຮຽນ ຢູ່ໃນ ບົດເລື່ອງ "ການຕຳນິຕິຊົມ ໂຄງການໂກຕາ" ວ່າ ສັງຄົມນິຍົມ ແລະ ລະ-ບອບກອມມູນິດ ແມ່ນສອງຂັ້ນແຕກຕ່າງກັນ ໃນຄວາມສຸກງອມທາງດ້ານ ເສດ ຖະກິດ ຂອງແບບວິທີການຜະລິດອັນໜຶ່ງອັນດຽວກັນ. ໂດຍຖືເອົາສັງຄົມນິຍົມ ເປັນໄລຍະຂັ້ນທຳອິດຂອງລະບອບກອມມູນິດນັ້ນ ກ.ມາກ ໄດ້ຊີ້ອອກໃຫ້ ເຫັນ ວ່າ ຢູ່ໃນຂັ້ນນີ້ ສັງຄົມແມ່ນອອກມາຈາກທ້ອງຈາກໄສ້ຂອງທົນນິຍົມ ແລະຍ້ອນ ແນວນີ້ນັ້ນຈຶ່ງຍັງຄົງຮັກສາຮ່ອງຮອຍຂອງສັງຄົມເກົ່າໃນໜົດທຸກດ້ານ- ດ້ານ ເສດຖະກິດ, ດ້ານຈຸນສົມບັດ ແລະ ດ້ານແນວຄິດຈິດໃຈ. ວ.ອິ.ເລນິນ ໄດ້ ເຄີຍເນັ້ນຢ້ຳວ່າ " ລະຫວ່າງສັງຄົມນິຍົມ ກັບລະບອບກອມມູນິດມີຄວາມແຕກ ຕ່າງກັນທາງດ້ານວິທະຍາສາດ ແມ່ນຢູ່ບ່ອນວ່າ ສັບທຳອິດແມ່ນໝາຍເຖິງໄລ ຍະທຳອິດຂອງສັງຄົມໃໝ່ທີ່ເຕີບໃຫຍ່ອອກມາຈາກທົນນິຍົມ, ສັບທີສອງ ແມ່ນ ໝາຍເຖິງໄລຍະຕໍ່ໄປຂອງສັງຄົມທີ່ຢູ່ໃນລະດັບສູງກວ່າເກົ່າ..."๘) . ການ ຂະຫຍາຍຕົວຂອງສັງຄົມນິຍົມ ພາໄປເຖິງໄລຍະທີສອງທີ່ສູງກວ່າເກົ່ານັ້ນ ຄື

---

๑) ວ.ອິ.ເລນິນ.ນິພົນຄົບຊຸດ, ເຫລັ້ມ ໓໒, ໜ້າ ๔๔.

๘) ວ.ອິ.ເລນິນ. ນິພົນຄົບຊຸດ, ເຫລັ້ມ ໓໐, ໜ້າ ๑๔.

ໄລຍະກອມມູນິດ. ສະຫລຸບແລ້ວ ສັງຄົມນິຍົມ ແລະ ລະບອບກອມມູນິດ ແມ່ນ ສອງຂັ້ນ, ສອງໄລຍະຂອງສັງຄົມກອມມູນິດອັນຫນຶ່ງອັນດຽວ.

๑. ລັດທິມາກ-ເລນິນ ວ່າດ້ວຍສະໄຫມຂ້າມຜ່ານ ຈາກທຶນນິຍົມ ໄປສູ່ ສັງຄົມນິຍົມ

ການກ້າວຂຶ້ນແບບປະຕິວັດຈາກທຶນນິຍົມ ໄປສູ່ສັງຄົມນິຍົມ

ໃນເວລາສຶກສາຄົ້ນຄວ້າການ ວິວັດຂະຫຍາຍຕົວຂອງສັງຄົມ ທາງດ້ານເສດຖະກິດ ຜູ້ ໃຫ້ ກຳເນີດລັດທິມາກ-ເລນິນ ທັງຫລາຍໄດ້ຄົ້ນພົບບັນດາກົດເກນແຫ່ງການ ກຳ ເນີດການເຕີບໃຫຍ່ຂະຫຍາຍຕົວ ແລະ ການອະວະສານຂອງທຶນນິຍົມ.

ການພົວພັນແຫ່ງການຜະລິດແບບທຶນນິຍົມ ໄດ້ກາຍມາເປັນສິ່ງທີ່ຈ່ອງ ດຶງ ການຂະຫຍາຍຕົວຂອງກຳລັງການຜະລິດຢ່າງໃຫຍ່ຫລວງ. ໄຊຊະນະຂອງມະ ຫາປະຕິວັດສັງຄົມນິຍົມເດືອນຕຸລາຢູ່ທີ່ປະເທດລັດເຊຍ ໃນປີ ๑ຈ๑ກ ໄດ້ເປີດ ສາກໃຫແກຍຸກສະໄຫມອັນໃຫມໃນການຂະຫຍາຍຕົວຂອງສັງຄົມມະນຸດ.

ພາຍຫລັງທີ່ພວກຟາຊິດ ເຢຍລະມັນ ແລະ ພວກຊຸນເສີກຍີ່ປຸ່ນ ໄດ້ ຮັບ ຄວາມປະລາໄຊໃນສົງຄາມໂລກຄັ້ງທີສອງ ໂດຍແມ່ນສະຫະພາບໂຊວຽດເປັນ ຜູ້ມີບົດບາດຕັດສິນຊີ້ຂາດໃນໄຊຊະນະດັ່ງກ່າວ ແລະ ພາຍຫລັງທີ່ການປະຕິວັດ ສັງຄົມນິຍົມໃນຫລາຍປະເທດໄດ້ຮັບໄຊຊະນະນັ້ນ ປະຊາຊາດໃນບາງປະເທດ ກໍ່ໄດ້ພາກັນກ້າວໄປຕາມເສັ້ນທາງກໍ່ສ້າງສັງຄົມນິຍົມ.

ການປະຕິວັດສັງຄົມນິຍົມຢູ່ໃນບັນດາປະເທດເອີລົບ, ອາຊີ ແລະ ຢູ່ ກູຍ ບາ ໄດ້ໂມ່ງບາດຄ້ອນອັນໃຫມ່ ທີ່ຫນັກຫນ່ວງໃສ່ທີ່ຫມັ້ນ ຂອງລະບອບທຶນນິຍົມ ແຫ່ງໂລກ. ມັນແມ່ນເຫດການອັນສຳຄັນກວ່າຫມູ່ ໃນປະຫວັດສາດຂອງ ໂລກ ຫລັງຈາກມະຫາປະຕິວັດສັງຄົມນິຍົມເດືອນຕຸລາຢູ່ທີ່ປະເທດລັດເຊຍ.

ລະບອບທຶນນິຍົມ ຈະຕ້ອງປ່ອຍປະບ່ອນຂອງຕົນໃຫ້ແກ່ສັງຄົມອັນໃຫມ່ຄືສັງ ຄົມນິຍົມຢ່າງເດັດຂາດ. ແຕ່ເຖິງຢ່າງໃດກໍ່ດີ ການສັບປ່ຽນທຶນນິຍົມດ້ວຍ ສັງ ຄົມນິຍົມ ກໍ່ບໍ່ສາມາດຈະເປັນໄປໄດ້ດ້ວຍມັນເອງ ແລະ ແບບຕາມມີ ຕາມ ເກີດ. ມີແຕ່ເດີນຕາມເສັ້ນທາງແຫ່ງການຕໍ່ສູ້ອັນເດັດດ່ຽວຂອງທົ່ວປວງຊົນ ,

ເດີນຕາມເສັ້ນທາງແຫ່ງການປະຕິວັດກຳມາຊີບເທົ່ານັ້ນ ຈຶ່ງ ຈະຕັດຕີນຕັດມື ພວກນາຍທຶນ ແລະ ພວກລູກແຫລ້ງຂອງພວກເຂົາ ບໍ່ໃຫ້ມີສິດອຳນາດ ແລະມີ ເງື່ອນໄຂກົດຂີ່ຂົ່ມເຫັງ ແລະ ຂູດຮີດປະຊາຊົນນັບທັງຈະສາມາດລົບລ້າງ ລະ ບອບນາຍທຶນໄດ້. ກ.ມາກ ໄດຂຽນໄວ້ວ່າ "ສັງຄົມນິຍົມ ບໍ່ອາດສາມາດຈະ ມີຂຶ້ນໄດ້ຖ້າບໍ່ມີການປະຕິວັດ. ຈຳເປັນຕ້ອງມີພຶດຕິກຳການເມືອງອັນນີ້ກໍ່ ຍ້ອນ ວ່າຕ້ອງການໃຫ້ມີການດັບສູນ ແລະ ມ້າງເພຼັອນເກົ່າ"[1]. ມັນມີຄວາມ ຈຳ ເປັນທີ່ຈະຕ້ອງເຮັດການປະຕິວັດເພື່ອຈະລົບລ້າງກຳມະສິດ ສ່ວນຕົວ ຫມາຍ ຄວາມວ່າ ເພື່ອຈະຍາດເອົາພາຫະນະການຜະລິດອັນຕົ້ນຕໍທັງຫມົດອອກ ຈາກ ກຳມືຂອງພວກນາຍທຶນ ແລະ ຂອງລັດນາຍທຶນ ແລະ ມອບຕໍ່ໃສ່ມື ປະຊາຊົນ ທັງຊາດແລ້ວ ສ້າງຕັ້ງກຳມະສິດລວມຫມູ່ແບບສັງຄົມນິຍົມຂຶ້ນ.

ການກ້າວຂຶ້ນແບບປະຕິວັດຈາກທຶນນິຍົມໄປຫາສັງຄົມນິຍົມ ແມ່ນດຳເນີນ-ໄປດ້ວຍສອງວິທີທາງຄື: ແບບສັນຕິວິທີ ແລະ ແບບບໍ່ແມ່ນສັນຕິວິທີ.

ການກ້າວຂຶ້ນສັງຄົມນິຍົມແບບບໍ່ແມ່ນສັນຕິວິທີ ຫມາຍເຖິງການລຸກຮື ຂຶ້ນ ດ້ວຍກຳລັງປະກອບອາວຸດ, ສົງຄາມກາງເມືອງ, ການໃຊ້ຄວາມຮຸນແຮງ - ເພື່ອຂັດຂວາງບໍ່ໃຫ້ພວກຊົນຊັ້ນນາຍທຶນມີສິດອຳນາດທາງດ້ານການເມືອງ.ຊົນ ຊັ້ນກຳມະກອນ ແລະ ກອງກຳລັງນຳຫນ້າກອມມູນິດຂອງຕົນ ແມ່ນມີຄວາມມຸ່ງ ຫມາຍຢາກດຳເນີນການປະຕິວັດສັງຄົມນິຍົມໂດຍບໍ່ໃຊ້ກຳລັງຮຸນແຮງປະຕິວັດ. ອັນນີ້ແມ່ນສອດຄ່ອງກັບສິດຜົນປະໂຫຍດຂອງຊົນຊັ້ນກຳມະກອນ ແລະ ຂອງປະ ຊາຊົນທັງຊາດ. ແຕ່ຢູ່ໃນເງື່ອນໄຂທີ່ພວກຊົນຊັ້ນຂູດຮີດຫັນໄປໃຊ້ ຄວາມຮຸນ-ແຮງ ເພື່ອປາບປາມປະຊາຊົນນັ້ນ ມີຄວາມຈຳເປັນທີ່ຈະຕ້ອງຫັນໄປໃຊ້ ການ ຕໍ່ສູ້ດ້ວຍກຳລັງປະກອບອາວຸດ. ບົດຮຽນໃນປະຫວັດສາດກໍ່ໄດ້ຢັ້ງຢືນໃຫ້ ເຫັນ ຄວາມຖືກຕ້ອງຂອງຄຳສອນຂອງ ວ.ອີ.ເລນິນ ທີ່ວ່າ ພວກຊົນຊັ້ນປົກຄອງ ບໍ່ ມີຈັກເທື່ອ ທີ່ຈະປະລະອຳນາດການປົກຄອງ ແລະ ສິດອຳນາດທາງດ້ານເສດ ຖະກິດຂອງຕົນ ດ້ວຍຄວາມສະຫມັກໃຈ.

ການປະຕິວັດສັງຄົມນິຍົມ ຈະມີການເຕີບໃຫຍ່ຂະຫຍາຍຕົວໄປ ພາຍ ໃຕ້ ຮູບການແບບສັນຕິວິທີ ຫລືແບບບໍ່ແມ່ນສັນຕິວິທີນັ້ນ ມັນກໍ່ລ້ວນແຕ່ຂຶ້ນກັບສະພາບ

---

[1] ກ.ມາກແລະຟ.ອັງແກນ. ບົດນິພົນ, ເຫລັ້ມ ຈ,ຫນ້າ ๔๔๗.

ການຊົ່ງຊາກຳລັງຕົວຈິງ ລະຫວ່າງຊົນຊັ້ນຕ່າງໆຢູ່ໃນປະເທດນັ້ນຫລືປະເທດນີ້, ລະດັບການຈັດຕັ້ງ ແລະ ຄວາມສຸກງອມຂອງຊົນຊັ້ນກຳມະກອນ ໃນດ້ານການເມືອງ, ອິດທິພົນ ແລະ ຄວາມສາມາດຂອງກອງກຳລັງນຳຫນ້າ ຂອງຊົນຊັ້ນກຳມະກອນ, ລະດັບການຕ້ານຢັນຄືນຂອງພວກຊົນຊັ້ນປົກຄອງ ແລະ ສະພາບການສາກົນ.

ການປະຕິວັດສັງຄົມນິຍົມ ດ້ວຍວິທີທາງແບບສັນຕິວິທີນັ້ນ ຫມາຍເຖິງການຍຶດອຳນາດແຫ່ງລັດໂດຍບໍ່ມີສົງຄາມກາງເມືອງ. ໂດຍເຕົ້າໂຮມເອົາປະຊາ-ຊົນສ່ວນຫລວງຫລາຍ ມາຢູ່ພາຍໃຕ້ການນຳພາຂອງຕົນ ຊົນຊັ້ນກຳມະກອນ - ແມ່ນສາມາດຈະຍາດແຍ່ງເອົາສຽງສ່ວນຫລາຍໄດ້ ຢ່າງຫມັ້ນຄົງ ຢູ່ໃນສະພາ ແລ້ວຫັນປ່ຽນມັນຈາກສະພາບເຄີຍເປັນເຄື່ອງມືຮັບໃຊ້ ສິດຜົນປະໂຫຍດ ທາງ ຊົນຊັ້ນ ຂອງພວກນາຍທຶນນັ້ນ ມາເປັນເຄື່ອງມືຮັບໃຊ້ປະຊາຊົນ ຜູ້ອອກແຮງ-ງານ. ສະພາຄືແນວນີ້ ແມ່ນສາມາດປະຕິບັດຫນ້າທີ່ການປະຕິວັດສັງຄົມນິຍົມ-ໄດ້ຢ່າງມີຜົນສຳເລັດ. ທັງຫມົດເຫລົ່ານີ້ ມີຄວາມສາມາດຈະເປັນໄປໄດ້ດ້ວຍ ວິທີການເສີມຂະຫຍາຍ ຢ່າງກວ້າງຂວາງ ແລະ ຢ່າງເນືອງນິດລຽນຕິດການ ຕໍ່ສູ້ຊົນຊັ້ນຂອງຊາວກຳມະກອນ ແລະ ປະຊາຊົນຜູ້ອອກແຮງງານທັງຫມົດຕ້ານ ຊົນຊັ້ນນາຍທຶນຜູກຂາດໃຫຍ່, ແລະ ຕ້ານພວກປະຕິການ ເພື່ອດຳເນີນ ການ ປະຕິຮູບອັນເລິກເຊິ່ງ ຢູ່ໃນສັງຄົມ ເພື່ອສັນຕິພາບ ແລະສັງຄົມນິຍົມ.

ສິ່ງທີ່ອຳນວຍຄວາມສະດວກໃຫ້ມີການຂະຫຍາຍຕົວ ໄປຄືແນວນີ້ແມ່ນການ ມີລະບົບສັງຄົມນິຍົມແຫ່ງໂລກ ທີ່ນັບມື້ນັບເຕີບໃຫຍ່ຂະຫຍາຍຕົວ, ການຊຸດ ໂຊມອ່ອນເພຍລົງຂອງລະບົບທຶນນິຍົມແຫ່ງໂລກ, ບັນດາຂໍ້ຂັດແຍ່ງ ຢູ່ພາຍໃນ ຂອງມັນ ທີ່ໄດ້ຈົມເລິກລົງຢ່າງບໍ່ເຄີຍມີມາກ່ອນ; ການພັງທະລາຍຂອງລະບົບ ລ່າເມືອງຂຶ້ນ ຂອງຈັກກະພັດນິຍົມ; ລະດັບການຈັດຕັ້ງ ແລະ ສະຕິຕື່ນ-ຕົວທາງດ້ານຊົນຊັ້ນອັນນັບມື້ນັບສູງຂຶ້ນ ຂອງຊົນຊັ້ນກຳມະກອນ ຢູ່ໃນບັນດາປະ ເທດທຶນນິຍົມ; ການເຄື່ອນໄຫວຂອງບັນດາພັກກອມມູນິດ ແລະ ພັກກຳມະ - ກອນ. ຢູ່ພາຍໃຕ້ເງື່ອນໄຂທີ່ກຳລັງສັງຄົມນິຍົມນັບມື້ນັບມີການເຕີບໃຫຍ່ ຂະ ຫຍາຍຕົວ, ຂະບວນການກຳມະກອນນັບມື້ນັບເຂັ້ມແຂງແຮງກ້າຂຶ້ນ ແລະ ທ່າ ແຮງຂອງຈັກກະພັດນິຍົມ ພັດນັບມື້ນັບອ່ອນເພຍລົງນັ້ນ ມັນອາດຈະເປັນໄປໄດ້ ທີ່ວ່າ ຢູ່ໃນບາງປະເທດ ກໍ່ອາດສາມາດຈະເກີດມີສະພາວະການຂຶ້ນຄືດັ່ງ ກ.

ມາກ ແລະ ເລນິນ ໄດ້ຄາດຄະເນໄວ້ລ່ວງຫນ້າ ໃນເມື່ອກ່ອນວ່າ ມັນ ຈະ ເປັນຜົນດີສຳລັບຊົນຊັ້ນນາຍທຶນ ເມື່ອພວກເຂົາເຈົ້າຫາກຕົກລົງເຫັນດີ ໃຫ້ມີ ການຂາຍພາຫະນະການຜະລິດ ອັນຕົ້ນຕໍຂອງຕົນ ແລະ ສະເພາະສຳລັບ ຊົນ ຊັ້ນກຳມາຊີບແລ້ວ ການຈ່າຍຄ່າພາຫະນະການຜະລິດດັ່ງກ່າວ ກໍ່ເປັນ ຜົນດີ ເຊັ່ນກັນ.

ຢູ່ໃນແຕ່ລະປະເທດໃດຫນຶ່ງ ກໍ່ລ້ວນແຕ່ແມ່ນບັນຫາເງື່ອນໄຂທາງດ້ານປະ ຫວັດສາດລະອຽດຕົວຈິງນັ້ນເອງ ທີ່ເປັນການຕັດສິນຄວາມອາດສາມາດຕົວຈິງ ໃນການຂະຫຍາຍຕົວ ຂອງການປະຕິວັດ ສັງຄົມນິຍົມໄປຕາມວິທີທາງແບບນັ້ນ ຫລືວິທີທາງແບບນີ້. ຜົນສຳເລັດຂອງການປະຕິວັດຂຶ້ນກັບບັນຫາທີ່ວ່າ ຊົນຊັ້ນ ກຳມະກອນ ແລະ ພັກຂອງຊົນຊັ້ນກຳມະກອນກຳຮູບການຕໍ່ສູ້ທັງຫມົດ ບໍ່ວ່າ - ແບບສັນຕິວິທີຫລືແບບບໍ່ແມ່ນສັນຕິວິທີນັ້ນ ໄດ້ເລີກຕົ້ນພໍປານໃດ ແລະກໍ່ມີຄວາມ ກຽມພ້ອມຈະຫັນປ່ຽນຈາກຮູບການຕໍ່ສູ້ແບບນີ້ໄປຫາຮູບການຕໍ່ສູ້ແບບໃຫມ່ ໄດ້ ຢ່າງໄວວາ ເຖິງຂະຫນາດໃດແທ້.

ຢູ່ໃນເງື່ອນໄຂປະຈຸບັນນີ້ ຍ້ອນມີການສະຫນັບສະຫນູນຈາກບັນດາປະເທດ ສັງຄົມນິຍົມ ດັ່ງນັ້ນການປະຕິວັດສັງຄົມນິຍົມ ຈຶ່ງມີຄວາມອາດສາມາດຈະເກີດ ຂຶ້ນໄດ້ນັບທັງຢູ່ໃນບັນດາປະເທດທີຫລ້າຫລັງ ທາງດ້ານເສດຖະກິດ. ໂດຍອີງ ໃສ່ການສະຫນັບສະຫນູນຈາກບັນດາປະເທດສັງຄົມນິຍົມທີ່ຂະຫຍາຍຕົວນັ້ນ ບັນ ດາປະເທດທີ່ຫລ້າຫລັງ ທາງດ້ານເສດຖະກິດ ກໍ່ສາມາດກ້າວຂຶ້ນສັງຄົມ ນິຍົມ ໄດ້ໂດຍບໍ່ຜ່ານໄລຍະຂະຫຍາຍຕົວ ຂອງທຶນນິຍົມ. ຕົວຢ່າງຄືແນວນີ້ນີ້ ກໍ່ໄດ້ ເກີດມີຢູ່ທີ່ປະເທດ ມົງໂກລີ.

ໂດຍບໍ່ຂຶ້ນກັບການທີ່ວ່າ ມັນດຳເນີນໄປຄືແນວໃດ-ແບບສັນຕິວິທີຫລື ແບບ ບໍ່ແມ່ນສັນຕິວິທີກໍ່ຕາມ, ການປະຕິວັດສັງຄົມນິຍົມ ເວລາໃດກໍ່ແມ່ນການ ທັບ ມ້າງການພົວພັນແບບທຶນນິຍົມອັນຫລ້າສະໄຫມໄປແລ້ວ ຢ່າງເຖິງກົກເຖິງຮາກ ແລະກໍ່ແມ່ນການສ້າງຕັ້ງການພົວພັນແບບສັງຄົມນິຍົມອັນໃຫມ່ຂຶ້ນມາ. ແມ່ນອຳ ນາດຂອງຊົນຊັ້ນກຳມະກອນທີ່ເປັນຜູ້ເຮັດໃຫ້ການດັດສ້າງດັ່ງກ່າວມານີ້ ປະກົດ ຜົນເປັນຈິງ ໂດຍສອດຄ່ອງກັບສິດຜົນປະໂຫຍດຂອງປະຊາຊົນທັງຊາດ.

ຄວາມຈຳເປັນໃນສະໄໝຂ້າມຜ່ານ ຍຸກສະໄໝແຫ່ງການດັດສ້າງ ສັງຄົມທຶນນິຍົມ ແບບປະຕິວັດເພື່ອໃຫ ກາຍມາເປັນສັງຄົມນິຍົມນັ້ນ ແມ່ນສະໄໝຂ້າມຜ່ານ. ມັນມີຄວາມຈຳເປັນ ທີ່ ຈະຕ້ອງມີສະໄໝຂ້າມຜ່ານ ຈາກທຶນນິຍົມ ໄປຫາສັງຄົມນິຍົມ ຍ້ອນວ່າ ການ ພົວພັນແຫ່ງການຜະລິດຂອງສັງຄົມນິຍົມ, ກຳມະສິດສັງຄົມນິຍົມ ບໍ່ທັນຈະສາ ມາດເກີດອອກມາຈາກທ້ອງຂອງທຶນນິຍົມໄດ. ພາຍໃຕ້ລະບອບທຶນນິຍົມ ເກີດ ມີໄດ້ກໍພຽງແຕ່ປະຖົມປັດໄຈຂອງສັງຄົມນິຍົມເທົ່ານັ້ນ.

ບັນດາປະຖົມປັດໄຈດັ່ງກ່າວນີ້ ແມ່ນຢູ່ບ່ອນວ່າ ລະບອບທຶນນິຍົມ ໄດ້ສ້າງ ໃຫ້ເກີດມີອຸດສາຫະກຳໃຫຍ່ແບບໃຊ້ເຄື່ອງຈັກ ຊຶ່ງແມ່ນປະຖົມປັດໄຈທາງດ້ານ ວັດຖຸຂອງສັງຄົມນິຍົມ ແລະ ເຮັດໃຫ້ມີການຫັນປ່ຽນການຜະລິດໄປເປັນ ຂອງ ສັງຄົມໃນລະດັບສູງຍອດ. ການເຕີບໃຫຍ່ຂອງການຜະລິດອຸດສາຫະກຳ ແລະ ການຂະຫຍາຍຕົວຂອງມັນ ລ້ວນແຕ່ນຳໄປເຖິງການເພີ່ມທະວີຄຸນແຖວຂອງຊົນ ຊັ້ນກຳມະກອນຂຶ້ນຕື່ມ ແລະ ທັງເຮັດໃຫ້ມີການເຕົ້າໂຮມ ກຳມະກອນ ຢູ່ຕາມ ວິສາຫະກິດຂະໜາດໃຫຍ່ ແລະ ຢູ່ຕາມສູນກາງອຸດສາຫະກຳຕ່າງໆ. ຢູ່ພາຍ ໃນຊົນຊັ້ນກຳມະກອນເອງ ກໍພວມມີການຈັດຕັ້ງກັນ, ພວກເຂົາເຈົ້າມີການ - ຊຸມນຸມສຶກຝຶນປະໂຫຍດທາງຊົນຊັ້ນຂອງຕົນ ແລະ ກັບກາຍມາເປັນກຳລັງ - ແຮງ ຢູ່ໃນສັງຄົມທີ່ມີຄວາມສາມາດຈະດັບສູນທຶນນິຍົມໄດ້.

ສຶກຝຶນປະໂຫຍດຂອງຊົນຊັ້ນກຳມະກອນ ແມ່ນສອດຄ່ອງ ກັບສຶກຝຶນປະ- ໂຫຍດຂອງຊາວຜູ້ອອກແຮງງານທັງໝົດ. ດັ່ງນັ້ນ ຊົນຊັ້ນກຳມະກອນຈຶ່ງເປັນ ຜູ້ນຳໜ້າການຕໍ່ສູ ຂອງມວນຊົນຜູ້ຖືກກົດຂູດຮີດ ເພື່ອໂຄ່ນລົ້ມທຶນນິຍົມ. ນີ້ ແມ່ນປະຖົມປັດໄຈອັດຕະວິໄສຂອງສັງຄົມນິຍົມ ທີ່ບໍ່ກົດຕົວອອກມາຢູ່ໃນ ທ້ອງ ຂອງທຶນນິຍົມ. ຊົນຊັ້ນກຳມະກອນຍິດອຳນາດມາມືຂອງຕົນດ້ວຍວິທີການ ປະຕິ ວັດ ແລະ ເຮັດແນວໃດຮ່ວມກັນກັບຊາວນາ ແລະ ຊາວຜູ້ອອກແຮງງານ ທັງ ໝົດ ເພື່ອພ້ອມກັນກໍ່ສ້າງສັງຄົມສັງຄົມນິຍົມອັນໃໝ່.

<u>ສະໄໝຂ້າມຜ່ານ</u> ຈາກທຶນນິຍົມ ໄປຫາສັງຄົມນິຍົມ ຊຶ່ມັນວ່າ ແມ່ນ ໄລຍະເວລາທີ່ໃຊ້ເຂົ້າໃນການລຶບລ້າງກຳມະສິດສ່ວນຕົວ ຕໍ່ພາທະນະການຜະ ລິດອັນຕົ້ນຕໍ, ລຶບລ້າງການກົດຂູດຮີດຄົນດ້ວຍຄົນນຳກັນ, ດັດສ້າງ ສັງຄົມນິ ຍົມທາງດ້ານເສດຖະກິດທັງໝົດ, ທາງດ້ານວັດທະນະທຳ ແລະ ທາງດ້ານ-

ລັດ. ຢູ່ໃນໄລຍະນີ້ ສັງຄົມນິຍົມ ແມ່ນບໍ່ທັນກໍ່ສ້າງສຳເລັດເທື່ອ, ມັນພວມໄດ້ຮັບການກໍ່ສ້າງຂຶ້ນ ແລະ ທຶນນິຍົມ ກໍຍັງບໍ່ທັນໄດ້ຖືກລົບລ້າງຢ່າງສົມເຊິ່ງເທື່ອ, ມັນພວມຖືກດັບສູນ.

ພາຍຫລັງທີ່ຊົນຊັ້ນກຳມາຊີບໄດ້ຍຶດເອົາອຳນາດ ແລະ ໄດ້ກຳເອົາ ຂະແໜງການພົ້ນຖານທີ່ລັກສະນະເປັນຂໍ້ກຸມແຈຢູ່ໃນເສດຖະກິດແຫ່ງຊາດ ແລ້ວ ທຶນນິຍົມແມ່ນຕົກຢູ່ໃນສະພາບຖືກເສຍໄຊແຕ່ມັນພັດຍັງບໍ່ທັນຖືກດັບສູນຢ່າງຣາບຄາບເທື່ອ. ໃນຊ່ວໄລຍະເວລາໃດໜຶ່ງ ວົງສາຫະກິດທຶນນິຍົມ ກໍຍັງຄົງຮັກສາໄວ້ຢູ່ໃນຂະແໜງການອຸດສາຫະກຳ, ກະສິກຳ ແລະ ການຄ້າຢູ່. ໜ້າທີ່ - ແມ່ນເຣັດແນວໃດບໍ່ສະເພາະແຕ່ຈະຕ້ອງພາບແພ່ການຕ້ານຢັ້ນຄືນ ຂອງ ພວກນາຍທຶນຢູ່ໃນຕ່ວເມືອງ ແລະ ຊຸນນະບົດທັ້ນ ແຕ່ຍັງຈະຕ້ອງລົບລ້າງທັ້ງສາຍເຫດທີ່ພາໃຫ້ມັນເກີດຂຶ້ນນັ້ນໃຫ້ໄດ້ອີກ.

ໜ້າທີ່ອັນສຳຄັນ ຂອງສະໄໝຂ້າມຜ່ານ ແມ່ນໜ້າທີ່ດ້ານສ້າງ ສັງຄົມນິ-ຍົມ ທາງດ້ານເສດຖະກິດ ການພະລິດຂະໜາດນ້ອຍຂອງຊາວນາ.

ໃນຊ່ວໄລຍະສະໄໝຂ້າມຜ່ານ ມີການກໍ່ສ້າງພົ້ນຖານທາງດ້ານວັດຖຸແລະເຕັກນິກຂອງສັງຄົມນິຍົມ.

ສະໄໝຂ້າມຜ່ານແມ່ນຄວາມຈຳເປັນອັນຂາດບໍ່ໄດ້ ສຳລັບແຕ່ລະປະເທດທີ່ກ້າວເດີນໄປຕາມເສັ້ນທາງສັງຄົມນິຍົມ. ອັນນີ້ແມ່ນເວົ້າເຖິງທັ້ງບັນດາ ປະເທດທີ່ຂະຫຍາຍຕົວ ທາງດ້ານອຸດສາຫະກຳ ແລະ ກໍທັ້ງບັນດາປະເທດທີ່ຫລ້າຫລັງ ທາງດ້ານເສດຖະກິດ ບໍ່ວ່າຈະເປັນປະເທດໃຫຍ່ ຫລືປະເທດນ້ອຍ ກໍ່ຕາມ.

ສະໄໝຂ້າມຜ່ານ ແມ່ນກວມເອົາໝົດຍຸກສະໄໝປະຫວັດສາດ ທີ່ເລີ່ມຕົ້ນມາຕັ້ງແຕ່ໄຊຊະນະ ຂອງການປະຕິວັດກຳມາຊີບ ແລະ ການສ້າງຕັ້ງ ຜະດັດການຂອງຊົນຊັ້ນກຳມາຊີບ ແລະ ສຳເລັດລົງດ້ວຍການກໍ່ສ້າງສັງຄົມນິຍົມ ທີ່ແມ່ນໄລຍະທຳອິດຂອງສັງຄົມກອມມູນິດ.

ແມ່ນມາກ, ອັງແກນ ແລະ ເລນິນ ທີ່ໄດ້ປະດິດສ້າງຄຳສອນກ່ຽວກັບສະໄໝຂ້າມຜ່ານ ຈາກທຶນນິຍົມ ໄປຫາສັງຄົມນິຍົມ. ພວກເພິ່ນໄດ້ນຳເອົາ - ຄວາມຮູ້ແບບວິທະຍາສາດກ່ຽວກັບເສັ້ນທາງ ກໍ່ສ້າງສັງຄົມນິຍົມ ມາປະກອບເປັນອາວຸດ ໃຫ້ແກ່ຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານທັ້ງໝົດ .

ບັນດາພັກກອມມູນິດ ແລະ ພັກກຳມະກອນ ກໍ່ໄດ້ປະກອບສ່ວນຢ່າງຫລວງຫຼາຍ ເຂົ້າໃນທິດສະດີມາກ-ເລນິນ ວ່າດ້ວຍສະໄຫມຂ້າມຜ່ານ.

ກ.ມາກ ໄດ້ເວົ້າວ່າ ລະຫວ່າງສັງຄົມທຶນນິຍົມ ກັບສັງຄົມສັງຄົມນິຍົມນັ້ນ ມີໄລຍະເວລາອັນຫນຶ່ງ ແຫ່ງການຫັນປ່ຽນອັນທີຫນຶ່ງ ມາເປັນອັນທີສອງ ແບບ ປະຕິວັດ. ມັນລະແມ່ນສະໄຫມຂ້າມຜ່ານທີ່ສອດຄ່ອງກັບໄລຍະເວລາອັນນີ້ທາງ ດ້ານການເມືອງ ແລະ ໃນໄລຍະເວລາອັນນີ້ໆເອງ ລັດກໍ່ບໍ່ສາມາດຈະ ແມ່ນ ອັນໃດອັນຫນຶ່ງທີ່ນອກເຫນືອຈາກຜະເດັດການແບບປະຕິວັດຂອງຊົນຊັ້ນກຳ ມາ ຊີບ.

ຜະເດັດການຂອງຊົນຊັ້ນກຳມາຊີບ

ຜະເດັດການຂອງຊົນຊັ້ນກຳມາຊີບ ແມ່ນການນຳພາຂອງລັດຕໍ່ ສັງຄົມ ໂດຍແມ່ນຊົນຊັ້ນກຳມະກອນເປັນຜູ້ປະຕິບັດ. ໂຄງການດຳເນີນງານຂອງ ພ. ກ.ສ.ຊ. ໄດ້ບົ່ງໄວ້ວ່າ "ຜະເດັດການຂອງຊົນຊັ້ນກຳມາຊີບ ແມ່ນຜະເດັດ-ການຂອງຄົນສ່ວນຫລວງຫລາຍຢ່າງຢ່ຂາດຂັ້ນຕໍ່ຄົນສ່ວນຫນ້ອຍ; ມັນເລັງ ໃສ່ ຕ້ານພວກກົດຂີ່ຂູດຮີດ, ຕ້ານກັບການກົດຂີ່ຂົ່ມເຫັງປະຊາຊາດແລະນາໆ ຊາດ ແລະ ແນໃສ່ລົບລ້າງທຸກການຂູດຮີດຄົນດ້ວຍຄົນນຳກັນ. ຜະເດັດການຂອງຊົນ ຊັ້ນກຳມາຊີບ ບໍ່ພຽງແຕ່ສະແດງເຖິງສິດຜົນປະໂຫຍດຂອງຊົນຊັ້ນ ກຳມະກອນ ເທົ່ານັ້ນ ແຕ່ຍັງສະແດງເຖິງສິດຜົນປະໂຫຍດຂອງປະຊາຊົນຜູ້ອອກແຮງງານ-ທັງຫມົດອີກ ". ຊົນຊັ້ນກຳມະກອນນຳໃຊ້ອຳນາດລັດ ເພື່ອສິດຜົນປະໂຫຍດ ຂອງມວນຊົນຜູ້ທີ່ຖືກກົດຂີ່ຂູດຮີດທັງຫມົດ. ການຕໍ່ສູ້ຮ່ວມກັນ ຕ້ານພວກກົດຂີ່ຂູດ ຮີດເພື່ອກໍ່ສ້າງສັງຄົມນິຍົມ ຂອງຊົນຊັ້ນກຳມະກອນ ກັບຊົນຊັ້ນຊາວນາໄດ້ເຕົ້າ ໂຮມພວກເຂົາເຈົ້າ ເຂົ້າເປັນພັນທະພາບອັນບໍ່ມີຫຍັງຈະມາມ້າງເພໄດ້. ພັນ ທະພາບອັນແຫນ້ນແກ່ນລະຫວ່າງຊົນຊັ້ນກຳມະກອນກັບຊົນຊັ້ນຊາວນາ ຜູ້ອອກ ແຮງງານ ແມ່ນຫລັກການອັນສູງສຸດຂອງຜະເດັດການຂອງຊົນຊັ້ນກຳມາຊີບ.

ຜະເດັດການຂອງຊົນຊັ້ນກຳມາຊີບ ຫມາຍເຖິງການເຂົ້າຮ່ວມໂດຍ ກົງ ຢ່າງຕັ້ງຫນ້າ ຫຼ້າວຫັນ ແລະ ກວ້າງຂວາງ ຂອງມວນຊົນຊາວຜູ້ອອກແຮງ - ງານ ໃນການຄຸ້ມຄອງການຜະລິດ, ໃນວຽກງານຂອງອົງການລັດ, ໃນການ ຊີ້ນຳຫມົດທຸກດ້ານຂອງຊີວິດທາງດ້ານສັງຄົມ ແລະ ວັດທະນະທຳຂອງປະເທດ

ຊາດ.

ໃນຖານະເປັນໂຄງປົ່ນ ທາງດ້ານການເມືອງ ທີ່ເກີດຂຶ້ນມາຈາກການປະຕິວັດສັງຄົມນິຍົມ ຜະເດັດການຂອງຊຸ້ນຊັ້ນກຳມາຊີບ ໄດ້ກຳນົດເອົາ ການທັບມ້າງທົ່ງຈັກຂອງລັດ ທີ່ເຮັດໜ້າທີ່ກົດຂີ່ມເຫັງ ແລະ ປາບປາມຊາວ ຜູ້ອອກແຮງງານນັ້ນ ມາເປັນໜ້າທີ່ຂອງຕົນ. ຊຸ້ນຊັ້ນກຳມາຊີບສວຍໃຊ້ອຳນາດ ລັດເພື່ອລົບລ້າງລະບອບເປັນເຈົ້າຄອບຄອງ ທາງດ້ານເສດຖະກິດຂອງຊຸ້ນຊັ້ນ - ນາຍທຶນ ແລະ ລົບລ້າງທຸກການຂູດຮີດຄົນດ້ວຍຄົນນຳກັນ. ແຕ່ ຜະເດັດການຂອງຊຸ້ນຊັ້ນກຳມາຊີບ ພັດບໍ່ໝາຍເຖິງສະເພາະແຕ່ ຄວາມຮຸນແຮງເທົ່ານັ້ນ ແລະ ມັນກໍ່ບໍ່ໄດ້ໝາຍເຖິງໃຫ້ເນັ້ນໜັກໃສ່ຄວາມຮຸນແຮງຊ້ຳ. ເນື່ອໃນ ອັນຕົ້ນຕໍຂອງຜະເດັດການຂອງຊຸ້ນຊັ້ນກຳມາຊີບ ບໍ່ແມ່ນເລື່ອງຄວາມຮຸນແຮງ ແຕ່ມັນແມ່ນເລື່ອງການກໍ່ສ້າງ, ເລື່ອງການສ້າງສາ ແລະ ປ້ອງກັນສັງຄົມ ສັງຄົມນິຍົມ ຈາກສັດຕູຂອງສັງຄົມນິຍົມ. ຊຸ້ນຊັ້ນກຳມາຊີບ ນຳໃຊ້ຄວາມຮຸນແຮງ ຍອມສາຍເຫດພາວະວິໄສ ໃນເມື່ອຊຸ້ນຊັ້ນນາຍທຶນຫາກມີການຕ້ານຢັ້ນຄືນ.

ຜະເດັດການຂອງຊຸ້ນຊັ້ນກຳມາຊີບ ແມ່ນເລື່ອງມີເພື່ອກໍ່ສ້າງສັງຄົມສັງຄົມນິຍົມ. ລັດຂອງຊຸ້ນຊັ້ນກຳມາຊີບ ແມ່ນສຸມກຳລັງເຫື່ອແຮງຂອງຕົນໄປໃສ່ການສ້າງສາເສດຖະກິດສັງຄົມນິຍົມ. ພາຍຫລັງທີ່ລັດໄດ້ມີການເຄື່ອນໄຫວ ຕົວຈິງໃນດ້ານເສດຖະກິດແລ້ວ ມັນກໍ່ໄດ້ເກີດມີລະບົບການພົວພັນແຫ່ງການຜະລິດອັນໃໝ່. ການພົວພັນດັ່ງກ່າວນີ້ ຕັ້ງຢູ່ບົນພື້ນຖານກຳມະສິດລວມໝູ່ ແບບສັງຄົມນິຍົມ ກ່ຽວກັບພາຫະນະການຜະລິດ ຊຶ່ງຮັບປະກັນເຮັດໃຫ້ມີການຜູກພັນກັນລະຫວ່າງຜູ້ຜະລິດໂດຍກົງ ກັບພາຫະນະການຜະລິດ, ມີການຮ່ວມມືກັນຖາວ ສະຫາຍ ແລະ ການຊ່ວຍເຫລືອຊຶ່ງກັນ ແລະ ກັນແບບສັງຄົມນິຍົມ ລະຫວ່າງຄົນຜູ້ທີ່ໄດ້ຮັບການປົດປ່ອຍອອກຈາກການກົດຂີ່ຂູດຮີດ.

ກຳລັງນຳໜ້າ ແລະ ຊີ້ທິດສ່ອງທາງຢູ່ໃນລະບົບຜະເດັດການຂອງຊຸ້ນຊັ້ນກຳມາຊີບນັ້ນ ກໍ່ລ້ວນແຕ່ແມ່ນບັນດາພັກກອມມູນິດ ແລະ ພັກກຳມະກອນທີ່ເປັນກອງກຳລັງທີ່ຢືນຢູ່ແຖວໜ້າສຸດຂອງການຕໍ່ສູ ຂອງຊາວຜູ້ອອກແຮງງານ ເພື່ອສ້າງສາສັງຄົມນິຍົມ ແລະ ລະບອບກອມມູນິດ.

ລັດທິມາກ-ເລນິນ ໄດ້ສິດສອນວ່າ ການຂ້າມຜ່ານຈາກທຶນນິຍົມໄປຫາສັງຄົມນິຍົມ ເປັນສາຍເຫດທີ່ພາໃຫ້ເກີດມີຮູບການການເມືອງຫລາຍໆອັນ ແຕກ

ຕ່າງກັນ. ແຕ່ຖົງຍ່າງໃດກໍ່ດີ ມັນກໍ່ມີທາດແທ້ເນື້ອໃນ ອັນດຽວກັນ-ຮູບການ ທັງຫມົດຫລົ່ານີ້ ລ້ວນແຕ່ແມ່ນຮູບການຕ່າງໆຂອງຜະດັດການຂອງຊົນຊັ້ນກຳ ມາຊີບ. ການທີ່ຜະດັດການຂອງຊົນຊັ້ນກຳມາຊີບ ມີຮູບການແຕກຕ່າງກັນ ນີ້ ມັນແມ່ນກົດກົນປະຫວັດສາດໃນການຂະຫຍາຍຕົວ ຂອງສັງຄົມ ຊຶ່ງ ວ.ອີ . ລະນິນ ໄດ້ຄາດຄະເນໄວ້ໃນເມື່ອກ່ອນແລ້ວ. ທ່ານໄດ້ຂຽນໄວ້ວ່າ: " ແນ່ ນອນ, ການຂ້ານຜ່ານຈາກທຶນນິຍົມ ໄປຫາສັງຄົມນິຍົມແມ່ນບໍ່ສາມາດ ຫລີກ ເວັ້ນຈາກການເກີດມີຮູບການການເມືອງເປັນຈຳນວນຫລວງຫລາຍຢ່າງ ມາກ ມາຍກາຍກອງ ແລະ ທັງມີຫລາຍຮູບຫລາຍສີໄດ້ແຕ່ໃນທັງຫມົດນີ້ ມັນກໍ່ຈະ ມີ ແຕ່ທາດແທ້ເນື້ອໃນອັນດຽວຢ່າງຫລີກເວັ້ນບໍ່ໄດ້ນັ້ນກໍ່ຄື: ຜະດັດການຂອງຊົນ ຊັ້ນກຳມາຊີບ" ๑).

ຢູ່ ສ.ສ.ສ.ຊ ພາຍຫລັງທີ່ການປະຕິວັດສັງຄົມນິຍົມເດືອນຕຸລາ ໄດ້ຮັບ-ໄຊຊະນະແລ້ວ ກໍ່ໄດ້ມີການສ້າງຕັ້ງຜະດັດການຂອງຊົນຊັ້ນກຳມາຊີບຂຶ້ນພາຍ ໃຕ້ຮູບການເປັນສະພາໂຊວຽດ. ບົນພື້ນຖານການສຶກສາຄົ້ນຄວ້າບົດຮຽນຂອງ ກອມມູນປາຣີ ແລະ ຂອງການປະຕິວັດຂອງລັດເຊຍ ໃນສອງຄັ້ງ-ໃນປີ ๑ຈ๐๕ ແລະ ປີ ๑ຈ๑ກ ນັ້ນ ແມ່ນ ວ.ອີ.ລະນິນ ທີ່ໄດ້ຄົ້ນພົບອຳນາດຂອງໂຊວຽດ-ໃນຖານະເປັນຮູບການທາງດ້ານລັດຂອງຜະດັດການຊົນຊັ້ນກຳມາຊີບ.

ຢູ່ໃນເງື່ອນໄຂອັນໃຫມ່ ທາງດ້ານປະຫວັດສາດ ທີ່ໄດ້ມີຂຶ້ນຫລັງຈາກ ໄຊ ຊະນະຂອງສັງຄົມນິຍົມຢູ່ທີ່ ສ.ສ.ສ.ຊ. ແລະ ມີການທັບມ້າງລັດທິ ຟາຊິດ ໃຫ້ພັງທະລາຍໄປ ໃນເວລາສົງຄາມໂລກຄັ້ງທີສອງນັ້ນ ລະບອບປະຊາທິປະ-ໄຕປະຊາຊົນ ກໍ່ໄດ້ຮັບໄຊຊະນະໃນບະເທດຈຳນວນຫນຶ່ງ. ລະບອບປະຊາທິ-ປະໄຕປະຊາຊົນ ແມ່ນຮູບການຈັດຕັ້ງການເມືອງຂອງສັງຄົມ. ເນື້ອໃນ ຂອງ ມັນ ກໍ່ແມ່ນຜະດັດການຂອງຊົນຊັ້ນກຳມາຊີບເຊັ່ນດຽວກັນ. ມັນໄດ້ສ່ອງແສງ ເຖິງລັກສະນະສະເພາະ ໃນການຂະຫຍາຍຕົວຂອງການປະຕິວັດສັງຄົມນິຍົມຢູ່ ພາຍໃຕ້ເງື່ອນໄຂທີ່ຈັກກະພັດນິຍົມພວມອ່ອນເພຍຊຸດໂຊມ ແລະ ການຊັ່ງຊາ-ກຳລັງກໍ່ມີການປ່ຽນແປງໂດຍເປັນຜົນດີໃຫ້ແກ່ສັງຄົມນິຍົມ. ລະບອບ ປະຊາທິ ປະໄຕປະຊາຊົນ ກໍ່ຍັງໄດ້ສ່ອງແສງເຖິງເງື່ອນໄຂທາງດ້ານປະຫວັດສາດແລະ

---

๑) ວ.ອີ.ລະນິນ. ນິພົນຄົບຊຸດ, ເຫລັ້ມ ມ້ມ, ຫນ້າ ມ້ຕ.

ຈຸດພິເສດທາງດ້ານຊາດຂອງແຕ່ລະປະເທດອີກ.

ຜະເດັດການຂອງຊົນຊັ້ນກຳມາຊີບ ທີ່ເກີດອອກມາຈາກການປະຕິວັດ ສັງຄົມນິຍົມນັ້ນ ແມ່ນຮັບປະກັນໃຫ້ ສັງຄົມນິຍົມໄດ້ຮັບໄຊຊະນະ. ແຕ່ຜ່ານ ການສ້າງສາສັງຄົມນິຍົມ ຜະເດັດການຂອງຊົນຊັ້ນກຳມາຊີບເອງ ກໍ່ມີການ ປ່ຽນແປງ. ເນື່ອງຈາກວ່າໄດ້ມີການລົບລ້າງພວກຊົນຊັ້ນຂູດຮີດໄປແລ້ວ ພາລະ - ຫນ້າທີ່ປາບປາມການຕ້ານຢັນຄືນຂອງພວກເຂົາເຈົ້າກໍ່ຫມົດໄປ. ຜ່ານການ - ສ້າງສາສັງຄົມນິຍົມ ພາລະຫນ້າທີ່ຈັດຕັ້ງວຽກງານເສດຖະກິດ, ພາລະຫນ້າທີ່ສຶກສາອົບຮົມ ແລະ ພາລະຫນ້າທີ່ວັດທະນະທຳ ຂອງຜະເດັດການຂອງຊົນຊັ້ນກຳມາຊີບ ພັດໄດ້ຮັບການເສີມຂະຫຍາຍຢ່າງຮອບດ້ານ. ເມື່ອງໄດ້ຮັບປະກັນໃຫ້ສັງຄົມນິຍົມໄດ້ຮັບໄຊຊະນະອັນສົມບູນ ໃນຂັ້ນສຸດທ້າຍແລ້ວ ຜະເດັດການ-ຂອງຊົນຊັ້ນກຳມາຊີບແມ່ນໄດ້ປະຕິບັດ ພາລະຫນ້າທີ່ປະຫວັດສາດຂອງຕົນແລະ ຖ້າຈະເບິ່ງບັນຫາໂດຍຢືນຢູ່ເບື້ອງຫນ້າທີ່ກ່ຽວກັບການຂະຫຍາຍຕົວຢູ່ພາຍ ໃນປະເທດແລ້ວ ຜະເດັດການຂອງຊົນຊັ້ນກຳມາຊີບ ກໍ່ບໍ່ມີຄວາມຈຳເປັນອີກແລ້ວ. ລັດທີ່ໄດ້ກຳເນີດເກີດຂຶ້ນມາເປັນລັດແຫ່ງຜະເດັດການຂອງຊົນຊັ້ນກຳມາຊີບນັ້ນ ກໍ່ແມ່ນຫັນປ່ຽນມາເປັນລັດຂອງທົ່ວປວງຊົນ, ເປັນອົງການທີ່ເປັນຕົວແທນຂອງ ສິດຜົນປະໂຫຍດ ແລະ ມານະຈິດຂອງປະຊາຊົນທັງຊາດ.

ລັດສັງຄົມນິຍົມຂອງທົ່ວປວງຊົນ ແມ່ນ ສືບຕໍ່ດຳເນີນພາລະກິດຂອງ ຜະເດັດການຂອງຊົນຊັ້ນກຳມາຊີບໃນການສ້າງສາສັງຄົມໃຫມ່ ແລະ ທັງເປັນຫຼັກການໃນການຈັດຕັ້ງວຽກງານເພື່ອປະຕິບັດຫນ້າທີ່ການກໍ່ສ້າງລະບອບກອມມູນິດ.

ບັນດາກົດເກນຕົ້ນຕໍຂອງການປະຕິວັດ ສັງຄົມນິຍົມ ແລະ ຂອງການ ກໍ່ສ້າງ ສັງຄົມນິຍົມ	ການຂ້າມຜ່ານຈາກທຶນນິຍົມ ໄປ ສູ່ສັງຄົມນິຍົມ ແມ່ນດຳເນີນ ໄປ ບົນພື້ນຖານບັນດາກົດເກນ ລວມ ສຳລັບຫມົດທຸກໆປະເທດທີ່ ກ້າວ

ຂຶ້ນໄປຕາມເສັ້ນທາງສັງຄົມນິຍົມ. ບັນດາກົດເກນດັ່ງກ່າວມານີ້ກໍ່ຄື: ກ) ການ ຍຶດເອົາອຳນາດທາງດ້ານການເມືອງ ໂດຍຊົນຊັ້ນກຳມະກອນ, ການສ້າງຕັ້ງ ຜະເດັດການຂອງຊົນຊັ້ນກຳມາຊີບ-ປະຊາທິປະໄຕສຳລັບຊາວຜູ້ອອກແຮງງານ ພາຍໃຕ້ບົດບາດນຳພາຂອງພັກມາກ-ເລນິນ, ຂ) ພັນທະພາບລະຫວ່າງ ຊົນ

ຊັ້ນກຳມະກອນ ກັບຊາວນາສ່ວນຫລວງຫລາຍ ແລະ ຊັ້ນຄົນຊາວ ຜູ້ອອກແຮງ ງານອື່ນໆທັງຫມົດ, ຄ) ການລົບລ້າງກຳມະສິດທົນນິຍົມ ແລະ ການສ້າງຕັ້ງ ກຳມະສິດລວມຫມູ່ ກ່ຽວກັບພາຫະນະການຜະລິດອັນຕົ້ນຕໍ, ງ) ການດັດສ້າງ ສັງຄົມນິຍົມ ເປັນເທື່ອລະກ້າວໃນການກະສິກຳບົນພື້ນຖານການຫັນປ່ຽນ ເປັນ ສະຫະກອນກະເສດ; ຈ) ການເສີມຂະຫຍາຍເສດຖະກິດແຫ່ງຊາດຢ່າງ ມີ ແຜນການເພື່ອແນໃສ່ກໍ່ສ້າງສັງຄົມນິຍົມ ແລະ ລະບອບກອມມູນິດ ແລະ ປັບ ປຸງລະດັບຊີວິດການເປັນຢູ່ຂອງຊາວຜູ້ອອກແຮງງານໃຫ້ສູງຂຶ້ນຢູ່ເລື້ອຍໆ; ສ) ການດຳເນີນການປະຕິວັດສັງຄົມນິຍົມໃນດ້ານແນວຄິດ ແລະ ວັດທະນະທຳ ແລະ ການກໍ່ສ້າງຖັນແຖວປັນຍາຊົນ ທີ່ຊື່ສັດສຸດຈະລິດ ຕໍ່ຊົນຊັ້ນກຳມະກອນ,ຕໍ່ ປະຊາຊົນຜູ້ອອກແຮງງານ ແລະ ຕໍ່ພາລະກິດສັງຄົມນິຍົມນັ້ນ ໃຫ້ມີເປັນ ຈຳ ນວນຫລວງຫລາຍ; ຊ) ການລົບລ້າງການກົດຂີ່ຂົ່ມເຫັງຊາດນັ້ນ ຊາດນີ້ແລະ ການສ້າງໃຫ້ມີຄວາມສະເຫມີພາບ ແລະ ມິດຕະພາບຖານອ້າຍນ້ອງລະຫວ່າງ ປະຊາຊາດ; ຍ) ການປັບປຸງ ແລະ ເສີມຂະຫຍາຍລັດສັງຄົມນິຍົມ, ການ ປ້ອງກັນຫມາກຜົນຂອງສັງຄົມນິຍົມ ຈາກການມ້າງເພທຳລາຍຂອງສັດຕູ ພາຍ ນອກ ແລະ ພາຍໃນ; ດ) ຄວາມສາມັກຄີລະຫວ່າງຊົນຊັ້ນກຳມະກອນຢູ່ ໃນ ປະເທດນີ້ ກັບຊົນຊັ້ນກຳມະກອນ ຢູ່ໃນປະເທດອື່ນນັ້ນ ຄືລັດທິສາກົນກຳມາຊີບ.

ບັນດາກົດເກນຕົ້ນຕໍຂອງການປະຕິວັດສັງຄົມນິຍົມ ແລະ ຂອງການກໍ່ສ້າງ ສັງຄົມນິຍົມໄດ້ຊີ້ໃຫ້ເຫັນວ່າ ຈະແມ່ນຢູ່ໃນປະເທດໃດກໍ່ຕາມ ຜ່ານການປະຕິ-ວັດສັງຄົມນິຍົມ ສ່ວນຫລາຍກໍ່ແມ່ນມີການແກ້ໄຂແຕ່ຫນ້າທີ່ອັນຫນຶ່ງອັນດຽວເທົ່າ ນັ້ນ ຄື ການລົບລ້າງການເປັນເຈົ້າຄອບຄອງຂອງພວກນາຍທຶນ ແລະ ການ ສ້າງສາສັງຄົມນິຍົມ.

ລັດທິມາກ-ເລນິນ, ຫລັກສູດຂອງມັນກ່ຽວກັບບັນດາກົດເກນຕົ້ນຕໍ ຂອງ ການປະຕິວັດສັງຄົມນິຍົມ ແລະ ຂອງການກໍ່ສ້າງສັງຄົມນິຍົມນັ້ນ ລ້ວນແຕ່ແມ່ນ ພື້ນຖານທາງດ້ານທິດສະດີຂອງແນວທາງຂອງບັນດາພັກກອມມູນິດ ແລະພັກກຳ ມະກອນຢູ່ໃນບັນດາປະເທດສັງຄົມນິຍົມ. ຄວາມມີພື້ນຖານທາງດ້ານວິທະຍາ-ສາດຂອງລັດທິມາກ-ເລນິນ ເປັນເງື່ອນໄຂສະດວກອັນຫນຶ່ງເພື່ອປະຕິບັດການ ສ້າງສາສັງຄົມ ສັງຄົມນິຍົມໃຫ້ສຳເລັດຜົນ.

ໃນເວລາດຽວກັນນີ້ ຮູບການແລະວິທີການກໍ່ສ້າງສັງຄົມນິຍົມ ກໍ່ອາດ ສາ

ມາດມີການແຕກຕ່າງກັນໄດ້. ອັນນັ້ນກ້ອນກັບເງື່ອນໄຂ ປະຫວັດສາດຕົວຈິງ ສະເພາະຂອງແຕ່ລະປະເທດ. ໃນເວລາທີ່ຫມົດທຸກໆປະເທດມີຈຸດລວມ ກ່ຽວກັບບັນດາກົດເກນຕົ້ນຕໍແຫ່ງການຂະຫຍາຍຕົວທາງດ້ານປະຫວັດສາດນັ້ນຄວາມແຕກຕ່າງກັນ ທາງດ້ານຈຸດພິເສດ ແລະ ຮົດຄອງປະເພນີປະຈຳຊາດ ທີ່ມີມາໃນປະຫວັດສາດຊ່ຳພັດເຮັດໃຫ້ເກີດມີບາງເງື່ອນໄຂສະເພາະພິເສດ ໃນການຂະຫຍາຍຕົວຂອງການປະຕິວັດສັງຄົມນິຍົມ ແລະ ໃນການກໍ່ສ້າງສັງຄົມນິຍົມ.

ອ.ອ.ເລນິນ ໄດ້ຊີ້ບອກວ່າ: "ຫມົດທຸກປະຊາຊາດຈະຕ້ອງກ້າວຂ້ຶນ ສັງຄົມນິຍົມ, ອັນນີ້ແນ່ນອນຫລີກເວັ້ນບ່ໄດ້, ແຕ່ປະຊາຊົນທັງຫມົດເຫລ່ານີ້ຈະ ບ່ພາກັນກ້າວຂ້ຶນແບບຄ້າຍຄືກັນຫມົດອອຍຕອຍ, ແຕ່ລະຊາດກໍ່ຈະນຳເອົາ ຈຸດພິເສດສະເພາະຂອງຕົນໄປປະກອບເຂ້ົາໃນຮູບການປະຊາທິປະໄຕ ຮູບນັ້ນຫລືຮູບນີ້, ໃນຜະເດັດການຂອງຊົນຊັ້ນກຳມາຊີບ ແບບນັ້ນຫລືແບບນີ້, ໃນ ຈັງຫວະ ນັ້ນຫລືຈັງຫວະນີ້ ໃນການດັດສ້າງສັງຄົມນິຍົມ ຕ່ດ້ານຕ່າງໆໃນ ຊີວິດຂອງສັງຄົມ "๑).

ແຕ່ນັ້ນດ້ານຈຸດພິເສດດັ່ງກ່າວນີ້ ແມ່ນບ່ເຮັດໃຫ້ເສ້ຍໃນຂອງກົດເກນ ຕົ້ນຕໍ ຂອງການປະຕິວັດສັງຄົມນິຍົມ ແລະ ຂອງການກໍ່ສ້າງສັງຄົມນິຍົມ ມີການປ່ຽນ ແປງໄດ້. ໃນພາກປະຕິບັດຂອງການກໍ່ສ້າງສັງຄົມນິຍົມໃນຕົວຈິງແລ້ວ ມັນ ກໍ ອາດສາມາດເກີດມີຄວາມແຕກຕ່າງກັນ ຍົກຕົວຢ່າງກໍ່ແມ່ນຢູ່ໃນຮູບການຕ່າງໆ ຂອງຜະເດັດການຂອງຊົນຊັ້ນກຳມາຊີບ, ໃນຮູບການລຸ້ມລ້ອງການຜະລິດ,ໃນ ວິທີການຫັນປ່ຽນເອົາການກະສິກຳມາເປັນລວມໝູ່ ແບບນີ້ຫລືແບບນັ້ນ ແຕ່ຜະ ເດັດການຂອງຊົນຊັ້ນກຳມາຊີບ, ການລົບລ້າງກຳມະສິດສ່ວນຕົວກ່ຽວກັບ ພາ ທະນະການຜະລິດ, ການເຕົ້າໂຮມເອົາຊາວນາເຂ້ົາໃນສະຫະກອນແລະ ກົດ ເກນຕົ້ນຕໍອັນອ່ືນໆອີກນັ້ນ-ທັງຫມົດເຫລ່ານ້ລ້ວນແຕ່ແມ່ນພື້ນຖານລວມທີ່ຂາດ ບ່ ໄດ້ເພ່ືອຈະພັດທະນາລະບອບສັງຄົມນິຍົມຢ່າງມີໄຊ.

ການຫລົບຫລີກອອກຈາກບັນດາກົດເກນຕົ້ນຕໍຂອງການປະຕິວັດສັງຄົມນິຍົມ ແລະຂອງການກໍ່ສ້າງສັງຄົມນິຍົມ, ການຍົກເອົາຈຸດພິເສດກ່ຽວກັບຊາດຂ້ຶນສູງ ເກີນຄວນ, ລັດທິຊາດນິຍົມລວມແຕ່ເປັນການນຳເອົາພົນເສ້ຍຫາຍມາສູ່ພາລະ ກິດກໍ່ສ້າງສັງຄົມນິຍົມ.

---

๑) ອ.ອ.ເລນິນ. ນິພົນຄົບຊຸດ, ເຫລ້ັມ ๓๐, ຫນ້າ ๑๘๓.

๔. ເສດຖະກິດໃນສະໄໝຂ້າມຜ່ານ

ເສດຖະກິດໃນສະໄໝຂ້າມຜ່ານ ຈາກທຶນນິຍົມ ໄປຫາສັງຄົມນິຍົມມີລັກ-ສະນະເປັນເສດຖະກິດທີ່ມີຫລາຍພາກສ່ວນ ໝາຍຄວາມວ່າ ມັນແມ່ນ ລະບົບ ສາຍໄຍພາກສ່ວນເສດຖະກິດຈຳນວນໜຶ່ງ.

<u>ບັນດາພາກສ່ວນເສດຖະກິດ</u> ແມ່ນຂະນິດຕ່າງໆຂອງການຜະລິດຢູ່ໃນສັງຄົມທີ່ຕ່າງຢູ່ບົນພື້ນຖານກຳມະສິດກ່ຽວກັບພາຫະນະການຜະລິດ ໃນຮູບການນັ້ນຫຼືຮູບການນີ້ ແລະ ການພົວພັນແຫ່ງການຜະລິດທີ່ສອດຄ່ອງກັບຮູບການກຳມະສິດດັ່ງກ່າວ ແລະ ແມ່ນການຜະລິດທີ່ມີລັກສະນະສະເພາະສຳລັບແຕ່ລະປະເທດນຶ່ງ ຫລືປະເທດນັ້ນ ໃນໄລຍະປະຫວັດສາດໃດໜຶ່ງ ສະເພາະເຈາะจົງຂອງການຂະຫຍາຍຕົວຂອງປະເທດ.

ໃນສະໄໝຂ້າມຜ່ານບັນດາພາກສ່ວນເສດຖະກິດໃນເສດຖະກິດຂອງ ປະເທດອາດຈະແຕກຕ່າງກັນ. ສິ່ງດັ່ງກ່າວນີ້ເກີດມາຈາກສະພາບຕົວຈິງທາງດ້ານປະຫວັດສາດຂອງປະເທດທີ່ໄດ້ກ້າວຂ້ຶນໄປຕາມເສັ້ນທາງກ້າວສູ່ສັງຄົມນິຍົມ. ຢູ່ໃນແຕ່ລະປະເທດທີ່ໄດ້ກ້າວເຂົ້າສູ່ສະໄໝຂ້າມຜ່ານ ຈາກທຶນນິຍົມ ໄປຫາສັງຄົມນິຍົມ ຈະຂາດສາມພາກສ່ວນເສດຖະກິດອັນເປັນພື້ນຖານບໍ່ໄດ້: ພາກສ່ວນເສດຖະກິດສັງຄົມນິຍົມ, ພາກສ່ວນເສດຖະກິດຜະລິດສິນຄ້າຂະໜາດນ້ອຍ ແລະພາກສ່ວນເສດຖະກິດທຶນນິຍົມ.

ພາກສ່ວນເສດຖະກິດສັງຄົມນິຍົມ ພາກສ່ວນເສດຖະກິດສັງຄົມນິຍົມ-ໃນເສດຖະກິດແຫ່ງຊາດແມ່ນສ້າງຂ້ຶນມາດ້ວຍວິທີການຫັນປ່ຽນພາຫະນະ ການຜະລິດ ມາເປັນຂອງສັງຄົມ ແບບສັງຄົມນິຍົມ.

ບາດກ້າວເດີ່ນບາດທຳອິດທີ່ສຳຄັນຍິ່ງ ຕາມທິດທາງນີ້ຂອງອຳນາດ ການປົກຄອງສັງຄົມນິຍົມ ແມ່ນການກຳເອົາຂະແໜງການພື້ນຖານ ທີ່ເປັນຂໍ້ມູນແຈຢູ່ໃນເສດຖະກິດແຫ່ງຊາດ ດ້ວຍວິທີການໂອນເອົາມາເປັນຂອງລັດສັງຄົມນິຍົມ.

<u>ການໂອນມາເປັນຂອງລັດສັງຄົມນິຍົມ</u> ແມ່ນການທີ່ລັດສັງຄົມນິຍົມ ຍຶດ

ເອົາພາຫະນະການຜະລິດ ຂອງພວກຊຸ້ມຊຸ້ມຊູດຮົດ ແລະ ຫັນເອົາມັນມາເປັນ ກຳມະສິດຂອງລັດ ສັງຄົມນິຍົມ (ເປັນສົມບັດຂອງທ່ວປວງຊົນ). ຄວາມ ຮັ່ງມີທັ້ງຫມົດຂອງຊຸ້ມຊຸ້ມນາຍທຶນ ລ້ວນແຕ່ ສ້າງຂຶ້ນມາດ້ວຍກຳມະກອນຫຼາຍ ເຊື່ນຄົນ. ຜ່ານການປະຕິວັດສັງຄົມນິຍົມ ໃນເມື່ອຊຸ້ມຊຸ້ນກຳມະກອນ ຫາກຍຶດ ເອົາພາຫະນະການຜະລິດນຳພວກນາຍທຶນມາຄົນ ຮັດຄືແນວນັ້ ຊຸ້ນຊຸ້ນກຳມະ ກອນກໍ່ແມ່ນຟື້ນຟູຄວາມເປັນທຳທາງດ້ານປະຫວັດສາດຂຶ້ນມາຄົນ ແລະ ກໍ່ທັ້ງ ແມ່ນການກະທຳທີ່ຖືກຕ້ອງຫມາຍອີກ. ອັນໃດທີ່ສ້າງຂຶ້ນມາດ້ວຍການອອກແຮງ-ງານ ຂອງປະຊາຊຸ້ນແລ້ວ ອັນນັ້ນກໍ່ຕ້ອງເປັນຂອງປະຊາຊຸ້ນ.

ພາຍຫລັງທີ່ໄດ້ມີການໂອນເອົາພາຫະນະການຜະລິດ ໄປເປັນຂອງ ລັດ ສັງຄົມນິຍົມແລ້ວ ຂໍ້ຂັດແຍ່ງພື້ນຖານຂອງທຶນນິຍົມ ກໍ່ໄດ້ມີການແກ້ໄຂໃຫ້ ຫມົດ ໄປ ຂໍ້ຂັດແຍ່ງດັ່ງກ່າວຄືຂໍ້ຂັດແຍ່ງລະຫວ່າງລັກສະນະເປັນຂອງສັງຄົມ ຂອງ ການຜະລິດກັບຮູບການກອບໂກຍເອົາຫມາກຜົນຂອງການຜະລິດແບບສ່ວນຕົວ-ທຶນນິຍົມ. ການພົວພັນແຫ່ງການຜະລິດ ໄດ້ຮັບການດັດແກ້ໃຫ້ສອດຄ່ອງ ກັບ ກຳລັງການຜະລິດ ແລະ ກໍ່ໄດ້ມີການລົບລ້າງຊຸປະສົກຕ່າງໆທີ່ກີດຂວາງ ການ ຂະຫຍາຍຕົວຂອງກຳລັງການຜະລິດ.

ການໂອນເອົາພາຫະນະແຫ່ງການຜະລິດ ມາເປັນຂອງລັດ ໄດ້ລົບ ລ້າງ ການຄອບຄອງທາງດ້ານເສດຖະກິດຂອງຊຸ້ມຊຸ້ມນາຍທຶນ. ການມອບພາຫະນະ ການຜະລິດໃຫ້ຊາວຜູ້ອອກແຮງງານ ໄດ້ເຮັດໃຫ້ປະຊາຊຸ້ນເປັນເຈົ້າຂອງ ປະ ເທດຊາດ ແລະ ເປັນກຳລັງເສດຖະກິດທີ່ເປັນເຈົ້າຄອບຄອງຢູ່ໃນສັງຄົມ.

ກ່ອນອື່ນຫມົດ ແມ່ນມີການໂອນເອົາອຸດສາຫະກຳຂະຫນາດໃຫຍ່, ບັນດາ ທະນາຄານ, ການຂົນສົ່ງທາງລົດໄຟ, ກຳລັງເຮືອຂົນສົ່ງສິນຄ້າ ແລະ ພາ ຫະນະສື່ສານ, ວິສາຫະກິດການຄ້າຂະຫນາດໃຫຍ່ ມາເປັນຂອງລັດ ແລະ ກໍ່ ມີການໂອນເອົາດິນດອນໄປເປັນຂອງລັດຢ່າງເຕັມສ່ວນ ຫລືເປັນພາກສ່ວນ.

ອີງຕາມຮູບການ ແລະ ລະດັບຄວາມຖືເດືອດຂອງການຕໍ່ສູ້ຊຸ້ມຊຸ້ນ ໃນສະ ໄຫມຂ້າມຜ່ານຢູ່ໃນແຕ່ລະປະເທດ ການໂອນມາເປັນຂອງລັດຈຶ່ງມີ ຈຸດພິເສດ ຂອງປະເທດໃຜລາວ. ຕົວຢ່າງກໍ່ຄືຢູ່ ສ.ສ.ສ.ຮ ທີ່ເປັນປະເທດບ່ອນຊຸ້ມຊຸ້ນ ນາຍທຶນໄດ້ຄຳເນີນການຕໍ່ສູ້ດ້ວຍກຳລັງປະກອບອາວຸດ, ໄດ້ຈັດຕັ້ງການສົ່ມ ຮູ ຮ່ວມຄິດ ປ່ອງຮ້າຍຕາມອຳນາດຂອງໂຊວຽດ, ໄດ້ທຶ່ມເສຍຫາຍໃຫ້ແກ ອຳ

ມາດຕ່ ່າກ ່ວ ດ ້ ວ ຍ ທ ຸ ກ ວ ິ ທ ີ ທ າ ງ ເ ທ ່ ່ າ ທ ີ ່ ຈ ະ ສ າ ມ າ ດ ເ ຮ ັ ດ ໄ ດ ້ ນ ັ ້ ນ ໄ ດ ້ ມ ີ ກ ານ ໂ ອ ນ ມ າ ເ ປ ັ ນ ຂ ອ ງ ລ ັ ດ ໂ ດ ຍ ບ ໍ ່ ມ ີ ກ ານ ຫ ິ ດ ແ ທ ນ ຄ ່ ່ າ ຄ ືນ ໃ ດ ໆ ເ ລ ີ ຍ ໃ ຫ ້ ແ ກ ່ ພ ວ ກ ເ ຈ ົ ້ າ ຂ ອ ງ ຜ ູ ້ ເ ກ ົ ່ ່ າ . ຢ ູ ່ ໃ ນ ປ ະ ເ ທ ດ ສ ັ ງ ຄ ົ ມ ນ ິ ຍ ົ ມ ເ ອ ີ ລ ີ ຍ ຈ ໍ ານ ວ ນ ຫ ນ ຶ ່ ງ ກ ານ ໂ ອ ນ ເ ອ ົ ່ ່ າ ພ າ ທ ະ - ນ ະ ກ ານ ຜ ະ ລ ິ ດ ອ ັ ນ ຕ ົ ້ ນ ຕ ໍ ່ ຢ ູ ່ ໃ ນ ອ ຸ ດ ສ າ ຫ ະ ກ ໍ າ , ໃ ນ ກ ານ ຂ ົ ນ ສ ່ ່ ງ ແ ລ ະ ກ ານ ສ ື ່ ສ ານ ມ າ ເ ປ ັ ນ ຂ ອ ງ ລ ັ ດ , ກ ານ ໂ ອ ນ ບ ັ ນ ດ າ ທ ະ ນ າ ຄ ານ ມ າ ເ ປ ັ ນ ຂ ອ ງ ລ ັ ດ ໄ ດ ຄ ໍ ່ ່ ານ ຶ ດ ໄ ປ ດ ້ ວ ຍ ວ ິ ທ ີ ກ ານ ຊ ຸ ້ ອ ສ າ ຫ ະ ກ ິ ດ ຄ ືນ ໃ ນ ລ າ ຄ າ ໃ ດ ຫ ນ ຶ ່ ງ ສ ະ ເ ພ າ ະ ເ ຈ າ ະ ຈ ົ ງ ນ ໍ າ ພ ວ ກ ເ ຈ ົ ້ າ ກ ໍ າ ມ ະ ສ ິ ດ ກ ານ ຫ ຸ ລ ະ ກ ິ ດ ຂ ະ ຫ ນ າ ດ ກ າ ງ ແ ລ ະ ຂ ະ ຫ ນ າ ດ ນ ้ ອ ຍ ກ ໍ ຄ ື ດ ວ ຍ ວ ິ ທ ີ ກ ານ ຊ ຸ ້ ອ ສ າ ຫ ະ ກ ິ ດ ທ ີ ່ ໃ ນ ເ ມ ື ່ ອ ກ ່ ອ ນ ເ ປ ັ ນ ກ ໍ າ ມ ະ ສ ິ ດ ຂ ອ ງ ພ ວ ກ ນ າ ຍ ທ ຶ ນ ຢ ູ ່ ໃ ນ ປ ะ ເ ທ ດ ກ ຸ ມ ພ ັ ນ ທ ະ ມ ິ ດ ຕ າ ມ ຣ ັ ດ ແ ລ ະ ນ ັ ້ ນ ຄ ືນ . ວ ິ ສ າ ຫ ະ ກ ິ ດ ທ ี ่ ເ ປ ັ ນ ກ ໍ າ ມ ะ ສ ิ ด ข อ ง พ ว ก เ ย ย ล ะ ม ั น , พ ว ก อ ิ ต า ล ี แ ล ะ พ ว ก น า ย ท ุ น ย ู ่ พ า ย ใ น ป ะ เ ท ด ท ี ่ ร ่ ว ม ม ื อ ก ั บ พ ว ก ฟ า ซ ิ ด ນ ั ้ ນ ແ ມ ่ ນ ໄ ດ ้ ຖ ຶ ກ ໂ ອ ນ ເ ອ ົ ້ າ ມ າ ເ ປ ັ ນ ຂ ອ ງ ລ ັ ດ ໂ ດ ຍ ບ ໍ ່ ມ ີ ກ ານ ຊ ົ ດ ເ ຊ ີ ຍ ໃ ດ ໆ ເ ລ ີ ຍ .

ພ າ ຍ ຫ ລ ັ ງ ທ ີ ່ ໄ ດ ້ ມ ີ ກ ານ ໂ ອ ນ ເ ອ ົ ້ ່ ພ າ ທ ะ ນ ะ ກ ານ ຜ ะ ລ ิ ด ອ ั น ส ำ ค ั ญ ก ว ่ า ห ม ู ่ ม า ເ ປ ັ ນ ຂ ອ ງ ລ ັ ດ ແ ລ ະ ໄ ດ ້ ມ ີ ກ ານ ດ ໍ ່ ່ ານ ຶ ນ ມ າ ດ ຕ າ ກ ານ ອ ື ່ ນ ໆ ຈ ໍ ານ ວ ນ ຫ ນ ຶ ່ ງ ລ ັ ດ ສ ັ ງ ຄ ົ ມ ນ ິ ຍ ົ ມ ໄ ດ ສ ້ ່ ້ າ ງ ພ າ ກ ສ ່ ວ ນ ເ ສ ດ ຖ ะ ກ ิ ด อ ั น ใ ห ม ่ ท ี ่ บ ่ เ ค ย ม ี ม า จ ั ก ເ ທ ື ອ ຢ ู ่ ໃ ນ ເ ສ ດ ຖ ะ ກ ิ ด ແ ຫ ່ ງ ຊ າ ດ ນ ั ້ ນ ກ ็ ค ื อ พ า ก ส ่ ว น เ ส ด ถ ะ ก ิ ด ส ั ง ค ม น ิ ย ม . พ า ก ส ่ ว น เ ส ด ถ ะ ก ิ ด ส ั ง ค ม น ิ ย ม ก ว ม เ อ ็ า บ ั น ด า โ ร ง จ ั ก , โ ร ง ง า น , ท ะ น า ค า ร , ก า น ข น ส ่ ง , ม ี ล ิ ข อ ง ล ั ด ย ู ่ ช ุ ม ช น บ ท , อ ิ ส า ห ะ ก ิ ด ก า ร ค ้ า แ ล ะ ส ะ ห ะ - พ ั น ธ ม ิ ต ร ส ะ ห ะ ก อ น ส ั ง ค ม น ิ ย ม เ ช ่ น : ส ะ ห ะ ก อ น ก า ร ส ะ ห ม อ ๆ , ก า ร ส ิ ม เ ช ื ่ อ , ก า ร ช ุ ม ใ ช ้ แ ล ะ ก า ร ผ ะ ล ิ ด . ก า ร ส ้ า ง ใ ห ้ ม ี พ า ก ส ่ อ ม เ ส ด ถ ะ ก ิ ด ส ั ง ค ม น ิ ย ม ย ู ่ ใ น เ ส ด ถ ะ ก ิ ด แ ห ่ ง ช า ด เ ป ็ น ก า ร เ ป ิ ด ส า ก ใ ห ้ แ ก ่ อ ง ก า ร ป ะ ก ิ ด ส ้ า ง อ ั น ใ ห ญ ่ โ ต ม ะ โ ห ล ม ข อ ง ป ะ ช า ช น ผ ่ า น ก า ร อ ั ด ส ้ า ง ธ า ก ถ า ม ข อ ง เ ส ด ถ ะ ก ิ ด ส ั ง ค ม น ิ ย ม .

พ า ก ส ่ อ ม เ ส ด ถ ะ ก ิ ด ส ั ง ค ม น ิ ย ม ม ี บ ท บ า ท ส ำ ค ั ญ ใ น เ ส ด ถ ะ ก ู ้ ย ู ่ ใ น ส ะ ไ ห ม อ ย ่ า ง ม า ก . พ า ก ส ่ อ ม เ ส ด ถ ะ ก ิ ด ส ั ง ค ม น ิ ย ม ม ี บ ท บ า ท ส ำ ค ั ญ ย ิ ่ ง อ ย ่ า ง ย ิ ่ ง ใ น ก า ร ช ่ ว ย ใ ห ้ ร ั ฐ บ า ล ส า ม า ร ถ ด ำ เ น ิ น ก า ร ป ฏ ิ ว ั ต ิ ส ั ง ค ม น ิ ย ม ไ ด ้ อ ย ่ า ง ร ว ด เ ร ็ ว ท ี ่ ส ุ ด ใ น ร ะ ย ะ เ ว ล า อ ั น ส ั ้ น ก ็ ค ื อ ส า ม า ร ถ ท ำ ล า ย ล ้ า ง ร ะ บ อ บ ก ด ข ี ่ ร ี ด ข ู ด ร ี ด ท ี ่ ม ี อ ย ู ่ ใ น ส ั ง ค ม ล ง

ໜ່ວຍ ທີ່ກ່ວາຫນ້າກ່ວາໜ່ວຍ.

ຢູ່ໃນວິສາຫະກິດສັງຄົມນິຍົມ ບໍ່ມີການກົດຂີ່ຂູດຮີດຄົນດ້ວຍຄົນນຳກັນ, ແຮງງານຄົນກໍ່ເຊົ້າເປັນສິນຄ້າອີກແລ້ວ ແລະ ການອອກແຮງງານຂອງກຳມະກອນກໍ່ໄດ້ກັບກ່າຍມາເປັນການອອກແຮງງານຮັບໃຊ້ຕົນເອງ ແລະ ຮັບໃຊ້ ສັງຄົມ ຂອງຕົນ. ເຄື່ອງຂອງທີ່ຜະລິດອອກມາຢູ່ໃນວິສາຫະກິດ ທີ່ນອນຢູ່ໃນພາກສ່ວນ ເສດຖະກິດສັງຄົມນິຍົມ ລ້ວນແຕ່ຕົກໄປເປັນຂອງປະຊາຊົນ ຜູ້ອອກແຮງງານ ທັ້ງໝົດ. ການເກີດມີພາກສ່ວນເສດຖະກິດສັງຄົມນິຍົມອັນມີກຳມະສິດ ລວມ ໝູ່ແບບສັງຄົມນິຍົມ ກ່ຽວກັບພາຫະນະການຜະລິດ ໝາຍເຖິງການເກີດມີ , ການເຕີບໃຫຍ່ຂະຫຍາຍຕົວ ແລະ ການເປີດກ້ວາງຂົງເຂດ ການເຄື່ອນໄຫວ ຂອງບັນດາກົດເກນເສດຖະກິດໃໝ່ ອອກເປັນເທື່ອລະຂັ້ນນັ້ນ ກໍ່ຄືບັນດາ ກົດ ເກນເສດຖະກິດຂອງສັງຄົມນິຍົມ. ບັນດາກົດເກນເສດຖະກິດ ຂອງທຶນນິຍົມ ແມ່ນຄ່ອຍໆໝົດກຳລັງແຮງຂອງຕົນໄປ ແລະ ໃນທີ່ສຸດກໍ່ຈະຢຸດເຊົ້າບໍ່ມີ ການ ເຄື່ອນໄຫວອີກຕໍ່ໄປ.

ພາກສ່ວນເສດຖະກິດການຜະລິດ ສິນຄ້າຂະໜາດນ້ອຍ ແລະພາກ ສ່ວນເສດຖະກິດ ທຶນນິຍົມ	<u>ພາກສ່ວນເສດຖະກິດການຜະລິດສິນ ຄ້າຂະໜາດນ້ອຍ</u> ກວມເອົາການ- ຜະລິດຂອງພວກຊາວນາ,ພວກນາຍ ຊ່າງ ແລະ ຊາວຫັດຖະກອນ ທີ່ຕັ້ງ

ຢູ່ບົນພື້ນຖານກຳມະສິດ ສ່ວນຕົວ ກ່ຽວກັບພາຫະນະການຜະລິດ ແລະ ການ ອອກແຮງງານສ່ວນຕົວຂອງບຸກຄົນ. ພວກນີ້ມີການພົວພັນໃນລະດັບໃດ ລະດັບ ໜຶ່ງ ກັບຕະຫລາດ. ການຜະລິດສິນຄ້າຂະໜາດນ້ອຍແມ່ນຕັ້ງຢູ່ ບົນພື້ນຖານ ກຳມະສິດສ່ວນຕົວ ກ່ຽວກັບພາຫະນະການຜະລິດອັນເຮັດໃຫ້ມັນໃກ້ຊິດກັບການ ຜະລິດທຶນນິຍົມ. ແຕ່ຖ້າເບິ່ງໄປໃນອີກດ້ານໜຶ່ງ ສະພາບການຂອງຊາວນາຜູ້ ດຳເນີນການຜະລິດນ້ອຍຢູ່ພາຍໃຕ້ເງື່ອນໄຂຂອງທຶນນິຍົມ ບໍ່ມີຄວາມໝັ້ນທ່ຽງ ພວກເຂົາເຈົ້າຖືກທຶນຂະໜາດໃຫຍ່ກົດຂີ່ຂູດຮີດ ດັ່ງນັ້ນ ພວກເຂົາເຈົ້າຈຶ່ງ ມີ ຄວາມສົນໃຈ ຢາກລົບລ້າງໝົດທຸກຮູບການກົດຂີ່ຂູດຮີດໃຫ້ສູນຫາຍໄປ: ທັ້ງ ໝົດນີ້ ແມ່ນເຮັດໃຫ້ຊາວນາຜູ້ອອກແຮງງານໃກ້ຊິດກັບຊົນຊັ້ນກຳມາຊີບ.

ໃນເບື້ອງຕົ້ນຂອງສະໄໝຂ້າມຜ່ານ ພາກສ່ວນເສດຖະກິດການຜະລິດສິນ

ຄ້າຂະຫນາດນ້ອຍ ແມ່ນກວມເອົາພາກສ່ວນໃຫຍ່ຂອງພົນລະເມືອງ ຢູ່ໃນ ປະເທດສັງຄົມນິຍົມຫລາຍໆບ່ອນ. ຜ່ານການກໍ່ສ້າງສັງຄົມນິຍົມ ໄດ້ມີ ການດັດສ້າງການຜະລິດສິນຄ້າຂະຫນາດນ້ອຍ ໃຫ້ເປັນການຜະລິດສັງຄົມນິຍົມ ຜ່ານການຫັນປ່ຽນເປັນສະຫະກອນ.

<u>ພາກສ່ວນເສດຖະກິດທຶນນິຍົມ</u> ກວມເອົາການຜະລິດທີ່ຕັ້ງຢູ່ບົນພື້ນຖານກຳມະສິດສ່ວນຕົວກ່ຽວກັບພາຫະນະການຜະລິດ ແລະ ການອອກແຮງງານ ແບບຮັບຈ້າງ. ຕົວແທນຂອງພາກສ່ວນເສດຖະກິດທຶນນິຍົມຢູ່ຊົນນະບົດ ກໍ່ແມ່ນພວກຊາວນາຮັ່ງມີ ແລະ ຢູ່ໃນຕົວເມືອງກໍ່ແມ່ນພວກເຈົ້າຂອງວິສາຫະກິດທຶນນິຍົມທີ່ບໍ່ໄດ້ຖືກໂອນເອົາມາເປັນຂອງລັດ ຊຶ່ງໃນນັ້ນ ສ່ວນຫລາຍກໍ່ແມ່ນ ວິສາຫະກິດຂະຫນາດນ້ອຍ ແລະ ຂະຫນາດກາງ. ຢູ່ໃນພາກສ່ວນເສດຖະກິດອັນນີ້ມີການຂູດຮີດແລະແຮງງານກໍ່ເປັນສິນຄ້າ. ແມ່ນພວກເຈົ້າຂອງພາຫະນະການຜະລິດທີ່ເປັນຜູ້ກອບໂກຍເອົາຄຸນຄ່າສ່ວນເກີນ. ໃນເບື້ອງຕົ້ນ ລັດສັງຄົມນິຍົມ ແມ່ນຈຳກັດການຂະຫຍາຍຕົວຂອງພາກສ່ວນເສດຖະກິດທຶນນິຍົມ ເປັນຕົ້ນກໍ່ແມ່ນຈຳກັດບໍ່ໃຫ້ມີການຂູດຮີດແຮງງານ ແລະ ໃນຂັ້ນຕໍ່ໄປລັດກໍ່ດຳເນີນນະໂຍບາຍລົບລ້າງພາກສ່ວນເສດຖະກິດອັນນີ້.

ບັນດາພາກສ່ວນເສດຖະກິດສັງຄົມນິຍົມ, ພາກສ່ວນການຜະລິດສິນຄ້າຂະຫນາດນ້ອຍ ແລະ ພາກສ່ວນທຶນນິຍົມ ແມ່ນພາກສ່ວນເສດຖະກິດທີ່ເປັນ ພື້ນຖານໃນເສດຖະກິດສະໄຫມຂ້າມຜ່ານ. ນອກຈາກພາກສ່ວນເສດຖະກິດ ດັ່ງກ່າວມານີ້ແລ້ວ ຢູ່ໃນເສດຖະກິດສະໄຫມຂ້າມຜ່ານກໍ່ອາດຈະມີເສດຖະກິດການຜະລິດຂອງຊາວນາ ແບບທຳມະຊາດ ແລະ ມີທຶນນິຍົມແຫ່ງລັດ. ພາກ ສ່ວນເສດຖະກິດດັ່ງກ່າວນີ້ ແມ່ນມີຢູ່ໃນແຕ່ລະປະເທດທີ່ໄດ້ເລີ່ມລົງມືກໍ່ສ້າງສັງຄົມນິຍົມ. ການດຳລົງຄົງຕົວຂອງມັນ ແມ່ນຂຶ້ນກັບເງື່ອນໄຂທາງດ້ານເສດຖະກິດທີ່ໄດ້ມີຂຶ້ນຢູ່ໃນສະໄຫມຂ້າມຜ່ານ ໃນປະເທດນັ້ນຫລືປະເທດນີ້.

ຍົກຕົວຢ່າງ, ຢູ່ ສ.ສ.ສ.ຊ ໃນສະໄຫມຂ້າມຜ່ານ ກໍ່ໄດ້ມີພາກ ສ່ວນເສດຖະກິດແບບທຳມະຊາດ ແລະ ມີທຶນນິຍົມແຫ່ງລັດ ຊຶ່ງດຳລົງຄົງຕົວຢູ່ພາຍໃຕ້ຮູບການສຳປະທານທີ່ອຳນາດໂຊວຽດໄດ້ມອບໃຫ້ແກ່ພວກນາຍທຶນ ຕ່າງປະເທດ ແລະ ພາຍໃຕ້ຮູບການອື່ນໆອີກຈຳນວນຫນຶ່ງ. ແຕ່ຢູ່ໃນເສດຖະກິດຂອງ ສ.ສ.ສ.ຊ ແລ້ວທຶນນິຍົມແຫ່ງລັດ ບໍ່ໄດ້ຂະຫຍາຍຕົວຢ່າງຫລວງຫລາຍພໍປານ

ใดเลีย.

ສະໄຫມຂ້ານຜ່ານມີຫນ້າທີ່ຮັບປະກັນໃຫ້ການພົວພັນ ແຫ່ງການຜະລິດແບບ ສັງຄົມນິຍົມມີຖານະຄອບຄອງຢ່າງຂາດຂັ້ນ ແລະ ກໍ່ສ້າງຮາກຖານຂອງສັງຄົມ ນິຍົມ. ຢາກເຮັດອັນນີ້ໄດ້ ມັນຮຽກຮ້ອງໃຫ້ມີການລົບລ້າງຢ່າງສົ້ນເຊີງ ພາກ ສ່ວນເສດຖະກິດທຶນນິຍົມ ໂດຍມີການເສີມຂະຫຍາຍຢ່າງສຸດຂີດ ອຸດສາຫະກຳ ແລະ ກະສິກຳສັງຄົມນິຍົມ ແລະ ສະເພາະຕໍ່ພາກສ່ວນເສດຖະກິດການຜະລິດ ສົນຄ້າຂະຫນາດນ້ອຍ ແລ້ວກໍ່ແມ່ນຈະຕ້ອງດັດສ້າງໃຫ້ມາເປັນຮູບການເສດຖະ ກິດສັງຄົມນິຍົມ.

<u>ບັນດາຊົນຊັ້ນຢູ່ໃນສະໄຫມຂ້ານຜ່ານ.</u>

ແຕ່ລະພາກສ່ວນເສດຖະກິດ ມີຊົນຊັ້ນໃດຫນຶ່ງຈະແຈ້ງທີ່ເປັນຕົວແທນ ໃຫ້ ແກ່ມັນ.

ພາກສ່ວນເສດຖະກິດ ສັງຄົມນິຍົມ	ຊົນຊັ້ນກຳມະກອນແລະຊົນຊັ້ນຊາວນາ ທີ່ຫ້ອນ ໂຮມກັນເຂົ້າເປັນວິສາຫະກິດແບບລວມຫມູ່ສະຫະ ກອນ.
ພາກສ່ວນເສດຖະກິດການຜະລິດ ສົນຄ້າຂະຫນາດນ້ອຍ	ຊົນຊັ້ນຊາວນາຢູ່ຊົນນະບົດ ທີ່ດຳເນີນ ການຜະລິດຂະຫນາດນ້ອຍ ແລະ ຂະ ຫນາດກາງ, ພວກນາຍຊ່າງ ແລະ ຊາວຫັດຖະກອນຢູ່ໃນຕົວເມືອງ.
ພາກສ່ວນເສດຖະກິດທຶນນິຍົມ	ຊົນຊັ້ນນາຍທຶນຢູ່ໃນຕົວເມືອງ ແລະ ພວກຊາວນາຮັ່ງມີຢູ່ຊົນນະບົດ.

ນີ້ຄືໂຄງປະກອບຊົນຊັ້ນໃນສະໄຫມຂ້ານຜ່ານຈາກທຶນນິຍົມ ໄປສູ່ສັງຄົມນິ-ຍົມ.

ຢູ່ໃນສະໄຫມຂ້ານຜ່ານສະພາບການຂອງຊົນຊັ້ນຕ່າງໆ ໄດ້ມີການປ່ຽນ -

ແປງຢ່າງເຖິງກົກເຖິງຮາກ ຖ້າຈະສົມທຽບໃສ່ກັບສະໄໝ ຢູ່ພາຍໃຕ້ລະບອບ ທຶນນິຍົມ.

ຊົນຊັ້ນກຳມະກອນຈຶ່ງເປັນຊົນຊັ້ນໜຶ່ງ ທີ່ຖືກກົດຂີ່ມເຫັງແລະຖືກ ຂູດຮີດ ຢູ່ພາຍໃຕ້ລະບອບທຶນນິຍົມ ມາບາດນີ້ກໍ່ໄດ້ມີບົດບາດນຳພາຢູ່ໃນສັງຄົມ ພາຍ ຫລັງທີ່ໄດ້ມີການສ້າງຕັ້ງພະຄັດການຂອງຊົນຊັ້ນກຳມາຊີບ. ຊົນຊັ້ນກຳມະ - ກອນ ໄດ້ກາຍເປັນຊົນຊັ້ນທີ່ມີຖານະເປັນເຈົ້າ, ໄດ້ກຳອຳນາດລັດຢູ່ໃນ ກຳມື ຂອງຕົນ ແລະ ກໍ່ໄດ້ພ້ອມກັນກັບຊາວຜູ້ອອກແຮງງານທັງໝົດເປັນເຈົ້າ ຂອງ ພາຫະນະການຜະລິດທີ່ໄດ້ຮັບການຫັນປ່ຽນໃຫ້ເປັນຂອງສັງຄົມ.

ຊົນຊັ້ນຊາວນາ ໄດ້ຮັບການປົດປ່ອຍອອກຈາກການຂົ່ມກັບພວກເຈົ້າທີ່ ດິນ ໃຫຍ່ ແລະ ລັດສັງຄົມນິຍົມໄດ້ມອບດິນຄອນໃຫ້ໄດ້ປອງກັນບໍ່ໃຫ້ມີການຂູດຮີດ- ໂດຍພວກຊາວນາຮັ່ງມີ ແລະ ຊ່ວຍເຫລືອໃນການຫັນປ່ຽນເປັນສະຫະກອນ.

ໃນພາກນະໂຍບາຍຕໍ່ຊົນຊັ້ນຊາວນາ ໃນສະໄໝຂ້າມຜ່ານ ລັດສັງຄົມນິ ຍົມ ແມ່ນອີງໃສ່ຫລັກຕຳລາຂອງເລນິນ ທີ່ວ່າ: ສ້າງພັນທະພາບ ກັບຊາວນາ ກາງ, ອີງໃສ່ຊາວນາຈົນ ແລະ ຕໍ່ສູ້ຕ້ານກັບພວກເຈົ້າຊາວນາຮັ່ງມີ. ການ ປະຕິບັດນະໂຍບາຍແນວນີ້ ແມ່ນພາໄປເຖິງບ່ອນມອນຊົນສ່ວນທີ່ເປັນ ພື້ນຖານ ຂອງຊົນຊັ້ນຊາວນາ ໄດ້ກາຍມາເປັນພັນທະມິດຂອງຊົນຊັ້ນກຳມະກອນ ໃນພາ ລະກິດກໍ່ສ້າງສັງຄົມນິຍົມ.

ຊົນຊັ້ນກຳມະກອນ ແລະ ຊົນຊັ້ນຊາວນາ ແມ່ນຊົນຊັ້ນພື້ນຖານໃນສະ ໄໝຂ້າມຜ່ານ. ນອກຈາກຊົນຊັ້ນຊາວນາແລ້ວ ຊົນຊັ້ນກຳມະກອນແມ່ນ ເຕົ້າ ໂຮມເອົາຊັ້ນຄົນຊາວຜູ້ອອກແຮງງານອື່ນໆອີກມາຢູ່ອອມຂ້າງຕົນ ຊົນຊັ້ນນັ້ນກໍ່ຄື ປັນຍາຊົນຜູ້ອອກແຮງງານ ພວກນາຍຊ່າງ ແລະ ຊາວຫັດຖະກຳ ຢູ່ໃນ ຕົວ ເມືອງ.

ຫລັງຈາກທີ່ຊົນຊັ້ນນາຍທຶນໄດ້ສູນເສຍສິດອຳນາດ ແລະ ພາຫະນະ ການ ຜະລິດອັນຕົ້ນຕໍໄປແລ້ວ ມັນກໍ່ເຊົາເປັນຊົນຊັ້ນທີ່ມີຖານະຄອບຄອງຢູ່ໃນສະໄໝ ຂ້າມຜ່ານ. ແຕ່ມັນກໍ່ຍັງຄົງຮັກສາກຳລັງເຜົ່ອແຮງໃນໄລຍະໜຶ່ງຕໍ່ໜ້ອຍ. ອັນ ນີ້ອາດຈະອະທິບາຍໄດ້ຈາກບ່ອນທີ່ວ່າ ການຜະລິດສົ່ມຄາຍະຫນາດນ້ອຍ ຈະ ພາໃຫ້ເກີດເອງໃນຂອບເຂດອັນກວ້າງຂວາງ. ນອກຈາກນັ້ນພາຍຫລັງທີ່ຊົນຊັ້ນ ນາຍທຶນໄດ້ສູນເສຍຖານະເປັນເຈົ້າຄອບຄອງຂອງຕົນໄປແລ້ວ ມັນກໍ່ຍັງໄດ້ຮັບ

ການສະຫນັບສະຫນູນຈາກທຶນນິຍົມສາກົນ.

ບັນດາຂໍ້ຂັດແຍ່ງໃນສະໄຫມຂ້າມຜ່ານ ເສດຖະກິດທີ່ມີລັກສະນະ ເປັນ ຫລາຍພາກສ່ວນຢູ່ໃນສະໄຫມ-ຂ້າມຜ່ານ ແລະ ການມີຊົນຊັ້ນປໍລະປັກກັນ ລ້ວນແຕ່ພາໃຫ້ເກີດມີຂໍ້ຂັດແຍ່ງ . ໃນສະໄຫມຂ້າມຜ່ານ ພາກສ່ວນເສດຖະກິດສັງຄົມນິຍົມ ຍັງບໍ່ທັນມີ ລັກສະນະ ກວມລວມເທື່ອ. ມັນຍັງບໍ່ທັນກວມເອົາຫມົດທຸກຂົງເຂດຂອງເສດຖະກິດ ແຫ່ງ ຊາດເທື່ອ ເປັນຕົ້ນກໍ່ແມ່ນຍັງບໍ່ທັນກວມເອົາການຜະລິດກະສິກຳ. ທຶນນິຍົມ ກໍ່ ຍັງຄົງມີຢູ່ ແລະ ຍັງດຳເນີນການຕໍ່ສູ້ຕ້ານຢັນກັບສັງຄົມນິຍົມ. ຍ້ອນແນວນີ້ ໆ ວ.ອີ. ເລນິນ ຈຶ່ງໄດ້ຊີ້ບອກໃຫ້ເຫັນວ່າ ສະໄຫມຂ້າມຜ່ານຈາກທຶນນິຍົມ ໄປ ສູ່ສັງຄົມນິຍົມ "...ແມ່ນບໍ່ອາດສາມາດທີ່ຈະບໍ່ເປັນໄລຍະແຫ່ງການຕໍ່ສູ້ ລະ ຫວ່າງທຶນນິຍົມ ທີ່ພວມອະວະສານກັບລະບອບກອມມູນິດ ທີ່ພວມເກີດຂຶ້ນໃຫມ່; ຫລືຖ້າເວົ້າໄປອີກຢ່າງຫນຶ່ງກໍ່ແມ່ນໄລຍະແຫ່ງການຕໍ່ສູ້ ລະຫວ່າງທຶນນິຍົມ ທີ່ ຖືກປະລາໄຊໄປແລ້ວ ແຕ່ພັດຍັງບໍ່ທັນຖືກດັບສູນເທື່ອ ແລະ ລະບອບກອມມູນິດ ທີ່ໄດ້ເກີດຂຶ້ນມາແລ້ວ ແຕ່ຫາກຍັງອ່ອນນ້ອຍທີ່ສຸດ " ๑).

ຂໍ້ຂັດແຍ່ງ ລະຫວ່າງສັງຄົມນິຍົມ ກັບທຶນນິຍົມ ແມ່ນຂໍ້ຂັດແຍ່ງ ພື້ນຖານ ໃນສະໄຫມຂ້າມຜ່ານ. ການແກ້ໄຂບັນຫາ "ໃຜຈະເອົາຊະນະໃຜ" ແມ່ນດຳ ເນີນໄປໃນທ່ານກາງການຕໍ່ສູ້ຊົນຊັ້ນອັນດຸເດືອດ. ຜົນສະຫລຸບຂອງການຕໍ່ສູ້ດັ່ງ ກ່າວນີ້ຂຶ້ນຢູ່ກັບບ່ອນທີ່ວ່າ ແມ່ນໃຜຈະສາມາດດູດດຶງເອົາຊົນຊັ້ນຊາວນາໄປນຳ ຕົນໄດ້.

ນະໂຍບາຍອັນຖືກຕ້ອງຂອງບັນດາພັກກອມມູນິດ ແລະ ພັກກຳມະກອນ , ນະໂຍບາຍຜູກຮັດພັນທະພາບອັນແຫນ້ນແກ່ນ ທາງດ້ານເສດຖະກິດ ແລະດ້ານ ການເມືອງ ລະຫວ່າງຊົນຊັ້ນກຳມະກອນ ກັບຊົນຊັ້ນຊາວນາ ໄດ້ສ້າງ ເງື່ອນ ໄຂໃຫ້ຊົນຊັ້ນກຳມາຊີບສາມາດດູດດຶງເອົາຊົນຊັ້ນຊາວນາ ຜູ້ອອກແຮງງານໄປ ນຳຕົນໄດ້. ສິ່ງດັ່ງກ່າວມານີ້ ໄດ້ເປັນການຕັດສິນຊີ້ຂາດຜົນສະຫລຸບຂອງການ ຕໍ່ສູ້ລະຫວ່າງສັງຄົມນິຍົມ ກັບທຶນນິຍົມ ໂດຍເປັນຜົນດີໃຫ້ແກ່ສັງຄົມນິຍົມ.

---

๑) ວ.ອີ.ເລນິນ. ນິພົນຄົບຊຸດ, ເຫລັ້ມ ນ້ຍ, ຫນ້າ ๘ກ๑.

ໃນສະໄໝອ້ານຜ່ານ ກໍ່ຍັງມີຂໍ້ຂັດແຍ່ງອັນອື່ນອີກ. ຕົວຢ່າງ, ໃນບາງປະ ເທດ ມີຂໍ້ຂັດແຍ່ງລະຫວ່າງລັດຂອບການເມືອງ ອັນກ້າວໜ້າ ກັບ ສະພາບ ແຫ່ງຄວາມຫລ້າຫລັງທາງດ້ານເສດຖະກິດ ແລະ ຕັກນິກຢູ່ໃນປະເທດ ດັ່ງ ກ່າວນີ້. ຢູ່ ສ.ສ.ສ.ຮ ໃນສະໄໝອ້ານຜ່ານ ກໍ່ໄດ້ມີຂໍ້ຂັດແຍ່ງດັ່ງກ່າວນີ້ . ຂໍ້ຂັດແຍ່ງດັ່ງກ່າວນີ້ ຍັງເປັນຈຸດເດັ່ນໃນລະດັບໃດ່ລະດັບໜຶ່ງສຳລັບບັນດາປະ ເທດສັງຄົມນິຍົມອື່ນໆຈຳນວນຫລວງຫລາຍອີກ. ຢູ່ໃນສະໄໝ ອ້ານຜ່ານ ມີຂໍ້ຂັດແຍ່ງລະຫວ່າງຊຸດສາທະກຳໃຫຍ່ສັງຄົມນິຍົມ ທີ່ໄດ້ມີການຕ້ຳໂຮມ ກັນ ເຂົ້າ ແລະ ເສດຖະກິດການຜະລິດຂະໜາດນ້ອຍ ແບບກະແຈກກະຈາຍ ແລະເອກະເທດຂອງຊາວນາ.

ຂໍ້ຂັດແຍ່ງທັງໝົດດັ່ງກ່າວມານີ້ ຢູ່ໃນສະໄໝອ້ານຜ່ານ ແມ່ນໄດ້ຮັບການ ແກ້ໄຂພາຍຫລັງທີ່ລັດຂອງຊົນຊັ້ນກຳມາຊີບໄດ້ດຳເນີນ ນະໂຍບາຍທາງ ດ້ານ ເສດຖະກິດ.

ມ. ນະໂຍບາຍທາງດ້ານເສດຖະກິດ ໃນສະໄໝອ້ານ ຜ່ານ. ແຜນການຂອງ ເລນິນ ກ່ຽວກັບ ການກ ສ້າງ ສັງຄົມນິຍົມ

ເພື່ອຢາກກໍ່ສ້າງສັງຄົມນິຍົມ ມີຄວາມຈຳເປັນທີ່ຈະຕ້ອງມີ ການຄົ້ນຄ້ວ ວາງນະໂຍບາຍທີ່ກ່ຽວຂອງ ທາງດ້ານເສດຖະກິດອອກມາ ໝາຍຄວາມ ວ່າ ຈະຕ້ອງວາງລະບົບສາຍໄຍ ມາດຕາການຕ່າງໆ ຂອງລັດຂອງຊົນຊັ້ນ ກຳມາ ຊີບ ທີ່ແນໃສ່ລົບລ້າງສ່ວນປະກອບຂອງທຶນນິຍົມຢ່າງສັ້ນເຊີງ ແລະ ຮັບປະກັນ ໄຊຊະນະຂອງສັງຄົມນິຍົມ ແລະ ກໍ່ຈະຕ້ອງມີການປະຕິບັດນະໂຍບາຍດັ່ງກ່າວ.

ຢູ່ໃນສະໄໝອ້ານຜ່ານ ນະໂຍບາຍທາງດ້ານເສດຖະກິດ ແນໃສ ປັບປຸງ ພັນທະພາບລະຫວ່າງຊົນຊັ້ນກຳມະກອນ ກັບຊົນຊັ້ນຊາວນາໃຫ້ເຂັ້ມແຂງ, ປັບ ປຸງຜະລິດການຂອງຊົນຊັ້ນກຳມາຊີບ, ເສີມຂະຫຍາຍກຳລັງການຜະລິດ ຢູ່ ໃນປະເທດ, ດັບສູນພວກຊົນຊັ້ນຊຸດຮົດ ແລະ ກໍ່ສ້າງສັງຄົມນິຍົມ. ບັນຫາ ການກຳນົດນະໂຍບາຍທາງດ້ານເສດຖະກິດຂອງແຕ່ລະປະເທດ ທີ່ໄດ້ກ້າວໄປ ຕາມເສັ້ນທາງສັງຄົມນິຍົມນັ້ນ ແມ່ນຂຶ້ນກັບສະພາບການເສດຖະກິດ ຢູ່ໃນ ສະ

ໄຫມ້ຂ້ າມຜ່ ານ ແລະ ການຊ້ ຽງຊ ານກ ຳລ ັງທ າງດ ້ ານຊ ຶ ມຊ ັ ້ ນ. ແ ຕ ່ ນ ັ ບ ດ ັ ງ ຫ ລ ັ ກ ການຕ ັ ້ ນ ຕ ໍ ຂ ອ ງ ມ ັ ນ ຍ ັ ງ ຄ ົ ງ ສ ືບ ຕ ໍ ່ ມ ີ ຜ ົ ນ ສ ັ ກ ສ ິ ດ ສ ໍ າ ລ ັ ບ ຫ ມ ົ ດ ທ ຸ ກ ໆ ປ ະ ເ ທ ດ ທ ີ ່ ສ ້ າ ງ ສ າ ສ ັ ງ ຄ ົ ມ ນ ິ ຍ ົ ມ.

ນ ັ ບ ຕ ັ ້ ງ ແ ຕ ່ ລ ະ ດ ູ ບ ານ ໃ ຫ ມ ່ ປ ີ ໑ ໗ ໑ ໒ ເ ປ ັ ນ ຕ ົ ້ ນ ມ າ ລ ັ ດ ໂ ອ ຢ ດ ໄ ດ ້ ເ ລ ີ ່ ມ ຕ ົ ້ ນ ດ ໍ າ ເ ນ ີ ນ ນ ະ ໂ ຍ ບ າ ຍ ທ າ ງ ດ ານ ເ ສ ດ ຖ ະ ກ ິ ດ ຄ ິ ແ ນ ວ ນ ັ ້ ມ າ ແ ຕ ່ ໃ ນ ນ ັ ້ ນ ຕ ໍ ່ ມ າ ພ າ ຍ ໃ ຕ ້ ຜ ົ ນ ສ ະ ທ ້ ອ ນ ຈ າ ກ ການ ແ ຊ ກ ແ ຊ ງ ຮ ຸ ກ ຮ ານ, ຈ າ ກ ສ ົ ງ ຄ າ ມ ກ າ ງ ເ ມ ື ອ ງ ແ ລ ະ ສ ະ ພ າ ບ ປ ະ ເ ທ ດ ອ ຸ ດ ສ ິ ກ ນ ້ າ ງ ເ ພ ທ ໍ ລ າ ຍ ດ ັ ່ ງ ນ ັ ້ ນ ລ ັ ດ ໂ ອ ຢ ດ ຈ ຶ ່ ງ ຈ ໍ ຕ ອ ງ ໄ ດ ້ ຫ ັ ນ ທ ິ ດ ໄ ປ ໃ ຊ ້ ນ ະ ໂ ຍ ບ າ ຍ "ລ ະ ບ ອ ບ ກ ອ ມ ມ ູ ນ ິ ດ ຍ າ ມ ສ ົ ງ ຄ າ ມ ".

ໃ ນ ໄ ລ ຍ ະ "ລ ະ ບ ອ ບ ກ ອ ມ ມ ູ ນ ິ ດ ຍ າ ມ ສ ົ ງ ຄ າ ມ" ອ ຳ ນ າ ດ ການ ປ ົ ກ ຄ ອ ງ ຂ ອ ງ ໂ ອ ຢ ດ ໄ ດ ້ ມ ີ ທ ິ ດ ທ າ ງ ເ ອ ົ ້ າ ແ ນ ວ ຫ ລ ັ ງ ໄ ປ ຮ ັ ບ ໃ ຊ ້ ແ ນ ວ ຫ ນ ້ າ. ໄ ດ ້ ມ ີ ການ ໂ ອ ນ - ເ ອ ົ ້ າ ອ ຸ ດ ສ າ ຫ ະ ກ ຳ ທ ັ ້ ງ ຫ ມ ົ ດ ມ າ ເ ປ ັ ນ ຂ ອ ງ ລ ັ ດ ຊ ຶ ່ ງ ໃ ນ ນ ັ ້ ນ ມ ີ ທ ັ ້ ງ ອ ຸ ດ ສ າ ຫ ະ ກ ຳ ຂ ະ ຫ ນ າ ດ ກ າ ງ ແ ລ ະ ຂ ະ ຫ ນ າ ດ ນ ້ ອ ຍ, ໄ ດ ້ ມ ີ ການ ຫ າ ມ ບ ໍ ່ ໃ ຫ ເ ອ ກ ະ ຊ ົ ນ ດ ໍ າ ເ ນ ີ ນ - ການ ຄ ້ າ ແ ລ ະ ກ ໍ ໄ ດ ້ ມ ີ ການ ວ າ ງ ລ ະ ບ ຽ ບ ການ ເ ກ ັ ບ ເ ກ ມ ສ ະ ບ ຽ ງ ອ າ ຫ ານ ທ ີ ່ ເ ຫ ລ ືອ ກ ິ ນ ຢ ່ າ ງ ຫ ລ ວ ງ ຫ ລ າ ຍ ເ ຖ ິ ງ ນ ັ ້ ນ ມ ີ ການ ຍ ົ ດ ເ ອ ົ ້ າ ສ ່ ວ ນ ເ ສ ດ ເ ຫ ລ ືອ ຂ ອ ງ ສ ະ ບ ຽ ງ ອ າ ຫ ານ ທ ີ ່ ມ າ ຈ າ ກ ຜ ົ ນ ຂ ອ ງ ການ ຜ ະ ລ ິ ດ ກ ະ ສ ິ ກ ຳ ນ ັ ້ ນ ນ ຳ ພ ວ ກ ຊ າ ວ ນ າ - ເ ພ ື ່ ອ ລ ຳ ລ ຽ ງ ໄ ປ ໃ ຫ ກ ອ ງ ທ ັ ບ ແ ລ ະ ພ ວ ກ ກ ຳ ມ ະ ກ ອ ນ. ເ ນ ື ່ ອ ງ ຈ າ ກ ສ ະ ພ າ ບ ເ ງ ື ່ ອ ນ ໄ ຂ ອ ັ ນ ຫ ຍ ຸ ງ ຍ າ ກ ໃ ນ ເ ວ ລ າ ສ ົ ງ ຄ າ ມ ກ າ ງ ເ ມ ື ອ ງ ແ ລ ະ ການ ແ ຊ ກ ແ ຊ ງ ຮ ຸ ກ ຮ ານ ທ າ ງ ດ ານ ການ ທ ະ ຫ ານ ຂ ອ ງ ຕ າ ງ ປ ະ ເ ທ ດ ດ ັ ່ ງ ນ ັ ້ ນ ລ ັ ດ ຖ ະ ບ ານ ໂ ອ ຢ ດ ຈ ຶ ່ ງ ໄ ດ ້ ວ າ ງ ລ ະ ບ ຽ ບ ການ ລ ຳ ລ ຽ ງ ແ ບ ບ ເ ບ ີ ກ ຈ ່ າ ຍ ແ ລ ະ ວ າ ງ ລ ະ ບ ຽ ບ ການ ປ ັ ງ ຄ ັ ບ ໃ ຫ ຫ ມ ົ ດ ທ ຸ ກ ຄ ົ ນ ອ ອ ກ ແ ຮ ງ ງ ານ. ທ ັ ງ ຫ ມ ົ ດ ລ ະ ບ ຽ ບ ສ າ ຍ ໄ ຍ ອ ຢ ກ ງ ານ ດ ັ ່ ງ ກ ່ າ ວ ທ ີ ່ ລ ັ ດ ຖ ະ ບ ານ ໄ ດ ດ ໍ າ ເ ນ ີ ນ ມ າ ນ ັ ້ ນ ເ ພ ີ ່ ນ ໄ ດ ເ ອ ີ ້ ນ ວ ່ າ ເ ປ ັ ນ ນ ະ ໂ ຍ ບ າ ຍ "ລ ະ ບ ອ ບ ກ ອ ມ ມ ູ ນ ິ ດ ຍ າ ມ ສ ົ ງ ຄ າ ມ ". ນ ະ ໂ ຍ ບ າ ຍ ດ ັ ່ ງ ກ ່ າ ວ ນ ີ ້ ແ ມ ່ ນ ນ ະ ໂ ຍ ບ າ ຍ ທ ີ ່ ໄ ດ ວ າ ງ ກ ັ ນ ອ ອ ກ ມ າ ດ ວ ຍ ຄ ວ າ ມ ຈ ຳ ເ ປ ັ ນ ແ ລ ະ ມ ີ ລ ັ ກ ສ ະ ນ ະ ຊ ົ ່ ວ ຄ າ ວ, ການ ວ າ ງ ນ ະ ໂ ຍ - ບ າ ຍ ດ ັ ່ ງ ກ ່ າ ວ ໄ ດ ້ ມ ີ ການ ຕ ິ ດ ໄ ລ ່ ເ ພ ື ່ ອ ຮ ັ ບ ປ ະ ກ ັ ນ ໄ ຊ ຊ ະ ນ ะ ຂ ອ ງ ລ ັ ດ ໂ ອ ຢ ດ ຢ ູ ່ ໃ ນ ເ ງ ື ່ ອ ນ ໄ ຂ ອ ັ ນ ຫ ຍ ຸ ງ ຍ າ ກ ແ ຫ ່ ງ ສ ົ ງ ຄ າ ມ ກ າ ງ ເ ມ ື ອ ງ ແ ລ ະ ການ ແ ຊ ກ ແ ຊ ງ ຮ ຸ ກ ຮ ານ ທ າ ງ ດ ານ ການ ທ ະ ຫ ານ ຂ ອ ງ ຕ າ ງ ປ ະ ເ ທ ດ.

ໃ ນ ປ ີ ໑ ໗ ໘ ໑ ເ ມ ື ່ ອ ໄ ດ ້ ມ ີ ການ ພ າ ບ ແ ພ ການ ແ ຊ ກ ແ ຊ ງ ຮ ຸ ກ ຮ ານ ທ າ ງ ດ ານ ການ ທ ະ ຫ ານ ຂ ອ ງ ຕ າ ງ ປ ະ ເ ທ ດ ແ ລ ະ ສ ົ ງ ຄ າ ມ ກ າ ງ ເ ມ ື ອ ງ ແ ລ ວ ອ ຳ ນ າ ດ ໂ ຊ

ວຽດ ກໍ່ໄດ້ຫັນທິດມາໃຊ້ນະໂຍບາຍທາງດ້ານເສດຖະກິດທີ່ໄດ້ປະກາດອອກມາ ໃນລະດູບານໃໝ່ຂອງປີ ໑໙໑໒. ໂດຍແຕກຕ່າງກັບ "ລະບອບກອມມູນິດ - ຍາມສົງຄາມ" ນະໂຍບາຍດັ່ງກ່າວນີ້ໄດ້ເອີ້ນຊື່ວ່າເປັນ <u>ນະໂຍບາຍແບບ - ໃໝ່ທາງດ້ານເສດຖະກິດ.</u> ໂດຍກຳນົດໃຫ້ມີພາສີກະສິກຳ ແທນ ການເກັບ-ເກນສະບຽງອາຫານທີ່ເຫລືອກິນນັ້ນ ໄດ້ເປັນການເປີດສາ ໃຫ້ແກ່ການຫັນ ປ່ຽນໄປສູ່ນະໂຍບາຍແບບໃໝ່ ທາງດ້ານເສດຖະກິດ. ພາສີກະສິກຳແມ່ນໄດ້ ຫມອຍກວ່າການເກັບເກນສະບຽງອາຫານ. ຫລັງຈາກເສຍພາສີກະສິກຳ ໃຫ້ ລັດແລ້ວ ສ່ວນທີ່ຍັງເຫລືອທັງຫມົດ ກໍ່ເປັນຂອງພວກຊາວນາເອົາໄປໝູນ ໃຊ້ ໄດ້. ຊາວນາ ສາມາດຂາຍສະບຽງອາຫານທີ່ເສດເຫລືອນັ້ນໄດ້ຢ່າງ ເສ ລີ.

ຈຳເປັນຕ້ອງວາງກຳນົດການເກັບພາສີກະສິກຳ ແລະ ປ່ອຍປະໃຫ້ມີການ ຄ້າຂອງເອກະຊົນ ທັງນີ້ກໍ່ເພື່ອເຮັດໃຫ້ຊາວນາເກີດມີຄວາມສົນໃຈ ນຳການ ຜະລິດ, ເພື່ອຍູ້ຫນູນການກະສິກຳຂຶ້ນ, ຟື້ນຟູຊຸດສາຫະກຳເບົາ ແລະ ຊຸດສາ ຫະກຳຫນັກ ແລະ ພາຍຫລັງທີ່ໄດ້ມີການສະສົມກຳລັງເຂັ້ມແຂງ ແລະ ພາຫະ ນະແລ້ວ ຈຶ່ງກ່າວຂຶ້ນຫຸກໂຈມຕີໃສ່ຮອງຮອຍເສດເຫລືອຂອງທຶນນິຍົມຢູ່ໃນ ປະ ເທດໃນຂັ້ນຕັດສິນຊີ້ຂາດ.

ຢູ່ ສ.ສ.ສ.ຊ ນະໂຍບາຍທາງດ້ານເສດຖະກິດໃນສະໄໝຜ່ານໄດ ຮັບການຄົ້ນຄວ້າວາງອອກມາ ແລະ ປະຕິບັດຢູ່ໃນສະພາບແວດລ້ອມແຫ່ງການ ປົດລ້ອມຂອງທຶນນິຍົມ ແລະ ການສ້າງສັງຄົມນິຍົມ ໃນເງື່ອນໄຂສະເພາະ ຂອງປະເທດໃດຫນຶ່ງ. ສິ່ງດັ່ງກ່າວໄດ້ມີຜົນສະທ້ອນສ່ວນໃດສ່ວນຫນຶ່ງໃສ່ການ ປະຕິບັດນະໂຍບາຍທາງດ້ານເສດຖະກິດຢູ່ ສ.ສ.ສ.ຊ. ແຕ່ໃນທີ່ສຸດ ຂັ້ນຕ້ ຫລັກການພື້ນຖານຂອງນະໂຍບາຍທາງດ້ານເສດຖະກິດໃນສະໄໝຜ່ານຢູ່ ສ.ສ.ສ.ຊ ກໍ່ມີຄວາມຫມາຍສຳຄັນ ທາງດ້ານສາກົນ. ແນ່ນອນຢູ່ໃນປະເທດ ຕ່າງໆ ຮູບການ ແລະ ວິທີການປະຕິບັດ ນະໂຍບາຍທາງດ້ານ ເສດຖະກິດ ໃດຫນຶ່ງໂດຍສະເພາະເຈາະຈົງນັ້ນ ລ້ວນແຕ່ມີຈຸດພິເສດສະເພາະຂອງ ປະ ເທດໃຜລາວ ທັງນີ້ເນື່ອງມາຈາກສະພາບເງື່ອນໄຂ ທາງດ້ານປະຫວັດສາດ ແຫ່ງການຂະຫຍາຍຕົວຂອງປະເທດດັ່ງກ່າວ. ຂັ້ນຕ້ປະເທດສັງຄົມນິຍົມອື່ນໆ ກໍ່ແມ່ນປະຕິບັດນະໂຍບາຍດັ່ງກ່າວນີ້ ຢູ່ໃນເງື່ອນໄຂທີ່ອຳນວຍ ຄວາມສະດວກ

ກວ່າ. ບັນດາປະເທດດັ່ງກ່າວນີ້ ໝູນໃຊ້ບົດຮຽນອັນອຸດົມຮັ່ງມີຍິ່ງ ຂອງສະ-ຫະພາບໂຊວຽດ, ການຊ່ວຍເຫລືອທາງດ້ານວິທະຍາສາດ-ເຕັກນິກ ແລະເສດ ຖະກິດຂອງໂຊວຽດ ກໍ່ຄືໝູນໃຊ້ບົດຮຽນ ແລະ ການຊ່ວຍເຫລືອຊຶ່ງກັນ ແລະ ກັນ ຂອງບັນດາປະເທດໃນອົງສາຄະນາຍາດສັງຄົມນິຍົມ, ນະໂຍບາຍ ທາງ ດ້ານເສດຖະກິດໃນສະໄໝຂ້າມຜ່ານ ໄດ້ເປັນການສ່ອງແສງໃຫ້ເຫັນເປັນຕົ້ນ ເປັນໂຕ ເຖິງແຜນການຂອງເລນິນ ກ່ຽວກັບການກໍ່ສ້າງສັງຄົມນິຍົມ.

ວ.ອິ.ເລນິນ ໄດ້ຕົ້ນຄວ້າການວາງແຜນການກໍ່ສ້າງສັງຄົມນິຍົມ ຢູ່ ສ.ສ ສ.ຊຸ ຊຶ່ງມີພື້ນຖານໜັກແໜ້ນທາງດ້ານວິທະຍາສາດ ໂດຍວາງ ຄາດໝາຍ ໃຫ້ຜ່ານຜ່າສະພາບແຫ່ງຄວາມຫລ້າຫລັງທາງດ້ານເສດຖະກິດ ແລະ ເຕັກນິກ ຂອງປະເທດ, ດຳເນີນການຫັນປ່ຽນເປັນອຸດສາຫະກຳສັງຄົມນິຍົມ, ດັດສ້າງ ສັງຄົມນິຍົມ ຕ້ານກະສິກຳ ແລະ ດຳເນີນການປະຕິວັດໃນດ້ານວັດທະນະທຳ.

ການຫັນປ່ຽນເປັນອຸດສາຫະກຳ ສັງຄົມນິຍົມ

ພາກສ່ວນປະກອບອັນສຳຄັນຍິ່ງ ຂອງ ແຜນການເລນິນ ກ່ຽວກັບການກໍ່ສ້າງ ສັງຄົມນິຍົມ ແມ່ນການຫັນປ່ຽນ ເປັນ ອຸດສາຫະກຳສັງຄົມນິຍົມ.

ມີແຕ່ຢູ່ບົນພື້ນຖານການຜະລິດໃຫຍ່ແບບໃຊ້ເຄື່ອງຈັກເຄື່ອງລາງຢູ່ໃນໜົດ ທຸກຂະແໜງການຂອງເສດຖະກິດແຫ່ງຊາດເທົ່ານັ້ນ ຈຶ່ງຈະສາມາດກໍ່ສ້າງສັງ ຄົມນິຍົມໄດ້. ວ.ອິ.ເລນິນ ໄດ້ຂຽນໄວ້ວ່າ: "ພື້ນຖານວັດຖຸອັນໜຶ່ງອັນດຽວ ເທົ່ານັ້ນ ຂອງສັງຄົມນິຍົມ ກໍ່ຕ້ອງແມ່ນອຸດສາຫະກຳຂະໜາດໃຫຍ່ ໃຊ້ເຄື່ອງ ຈັກເຄື່ອງລາງແລະທັງມີຄວາມສາມາດຈັດຕັ້ງການປູກຝັງຄົນໃໝ່ໄດ້ອີກ"(1).

ເປັນໄປບໍ່ໄດ້ທີ່ລະບອບທຶນນິຍົມ ຈະປະລະພື້ນຖານທາງດ້ານວັດຖຸ ແລະ ເຕັກນິກອັນອຸດົມຮັ່ງມີຄືແນວນີ້ໄວ້ໃຫ້ບັນດາປະເທດສ່ວນຫລວງຫລາຍ ທີ່ ໄດ້ ກ້າວໄປຕາມເສັ້ນທາງສັງຄົມນິຍົມນັ້ນ ສືບທອດ. ຕະຫລອດຊ່ວງໄລຍະ ແຫ່ງ ການດຳລົງຄົງຕົວຂອງຕົນ ທຶນນິຍົມສາມາດດຳເນີນການຫັນປ່ຽນເປັນອຸດສາ-ຫະກຳ ໄດ້ພຽງແຕ່ຢູ່ໃນປະເທດຈຳນວນ ໜ້ອຍດຽວໃນໂລກ ຊຶ່ງລວມມີ ພື້ນ

---

1) ວ.ອິ.ເລນິນ. ນິພົນຄົບຊຸດ, ເຫລັ້ມ ๔๔, ໜ້າ ๗.

ລະເມືອງເປັນຈຳນວນປະມານ ๑๕% ຂອງພົນລະເມືອງທັງໝົດຢູ່ໃນໂລກ . ຍອມແນວນີ້ ບັນຫາການຫັນປ່ຽນເປັນອຸດສາຫະກຳຈຶ່ງແມ່ນຄວາມຈຳເປັນ ອັນເປັນຕາຍສຳລັບບັນດາປະເທດສ່ວນຫລວງຫລາຍ ທີ່ໄດ້ເລີ່ມລົງມືກໍ່ສ້າງສັງຄົມນິຍົມ.

<u>ການຫັນປ່ຽນເປັນອຸດສາຫະກຳ</u> ແມ່ນການຂະຫຍາຍຕົວແບບໜຶ່ງ ຂອງອຸດສາຫະກຳ ຂະໜາດ ໃຫຍ່ທີ່ຮັບປະກັນໃຫ້ມີການດັດສ້າງເສດຖະກິດ ແຫ່ງຊາດທັງໝົດຢ່າງເຖິງກົກເຖິງຮາກ ບົນພື້ນຖານການໃຊ້ເຄື່ອງຈັກເຄື່ອງລາງ ຢ່ຽຢູ່ໃນນັ້ນ ກໍ່ມີທັງການດັດສ້າງການກະສິກຳນຳອີກດ້ວຍ.

ຂອດໃຈກາງໃນການຫັນປ່ຽນເປັນອຸດສາຫະກຳຢູ່ ສ.ສ.ສ.ຊ ໄດ້ ແກ່ ການເສີມຂະຫຍາຍບັນດາຂະແໜງການອຸດສາຫະກຳໜັກທີ່ດຳເນີນການຜະ-ລິດພາຫະນະແຫ່ງການຜະລິດເປັນຕົ້ນຕໍເຊັ່ນ: ໂລຫະ, ເຊື້ອເພີ, ເຄື່ອງຈັກ ແລະ ອຸປະກອນ, ພັດສະດຸກໍ່ສ້າງ. ບັນຫາການສ້າງ ອຸດສາຫະກຳ ຜະລິດ ເຄື່ອງຈັກທັນສະໄໝ ມີຄວາມໝາຍສຳຄັນຢ່າງໃຫຍ່ຫລວງເປັນພິເສດ ສຳ ລັບການຫັນປ່ຽນເປັນອຸດສາຫະກຳ.

ໂດຍຜ່ານການຫັນປ່ຽນເປັນອຸດສາຫະກຳສັງຄົມນິຍົມ ຈຶ່ງໄດ້ມີການກໍ່ສ້າງ ພື້ນຖານທາງດ້ານວັດຖຸເພື່ອແນໃສ່ເສີມຂະຫຍາຍບັນດາຮູບການດຳເນີນ ເສດ ຖະກິດແບບສັງຄົມນິຍົມເຊັ່ນ: ຮູບການຈັດຕັ້ງວິສາຫະກິດຂອງລັດ ແລະ ຂອງ ສະຫະກອນໃນຂະແໜງການອຸດສາຫະກຳ ແລະ ກະສິກຳ. ການຫັນປ່ຽນ ເປັນອຸດສາຫະກຳສ້າງເງື່ອນໄຂໃຫ້ບັນດາຮູບການເຄື່ອນໄຫວເສດຖະກິດ ດັ່ງ ກ່າວນີ້ ໄດ້ມີທ່າດີເລີດທາງດ້ານ ເຕັກນິກ ຊຶ່ງມີຄວາມຈຳເປັນເພື່ອຈະຍາດ ເອົາໄຊຊະນະໃນຂັ້ນສຸດທ້າຍ ໃນການສູ້ຢັນກັນກັບການຜະລິດທຶນນິຍົມ ແລະ ການຜະລິດສິນຄ້າຂະໜາດນ້ອຍ.

ການດຳເນີນການຫັນປ່ຽນເປັນອຸດສາຫະກຳສັງຄົມນິຍົມ ແມ່ນຂໍ້ກຸນແຈ - ເພື່ອຈະປະຕິບັດໃຫ້ໄດ້ບັນດາໜ້າທີ່ພື້ນຖານທັງໝົດໃນການກໍ່ສ້າງສັງຄົມນິຍົມ ຄື: ໜ້າທີ່ລົບລ້າງຢ່າງສິ້ນເຊີງ ພາກສ່ວນເສດຖະກິດທຶນນິຍົມ, ໜ້າທີ່ ດຳ ເນີນການດັດສ້າງສັງຄົມນິຍົມ ຕໍ່ການກະສິກຳ, ໜ້າທີ່ຜ່ານຜ່າສະພາບຄວາມ ຫລ້າຫລັງທາງດ້ານເສດຖະກິດ ແລະ ເຕັກນິກຂອງປະເທດ. ຍົກຕົວຢ່າງ ເຫດຜົນຂອງຄວາມຈຳເປັນທີ່ຈະຕ້ອງຫັນປ່ຽນເປັນອຸດສາຫະກຳຢູ່ ສ.ສ.ສ.ຊ

ເຊັ່ນ: ອັນທີໜຶ່ງ, ກ່ອນໄຊຊະນະຂອງການປະຕິວັດ ປະເທດລັດເຊຍ ເປັນ
ປະເທດໜຶ່ງທີ່ຫລ້າຫລັງ ທາງດ້ານເສດຖະກິດ ແລະ ເຕັກນິກ ຖ້າຈະທຽບ-
ໃສ່ບັນດາປະເທດທຶນນິຍົມທີ່ຂະຫຍາຍຕົວ. ປະເທດລັດເຊຍ ເປັນ ປະເທດ
ແຫ່ງການຜະລິດນ້ອຍຂອງຊາວນາ ແລະ ໃນໄລຍະຕົ້ນຂອງສະໄໝຂ້າມຜ່ານ
ຢູ່ ສ.ສ. ສ.ຊ ໄດ້ພົບຖ້ານທາງດ້ານເສດຖະກິດທີ່ເໝາະສົມ ສຳລັບທຶນນິ
ຍົມຫລາຍກວ່າສຳລັບສັງຄົມນິຍົມ. ອັນທີສອງ, ສ.ສ.ສ.ຊ ໄດ້ຕົກຢູ່ໃນ ວົງ
ປິດລ້ອມຂອງພວກປະເທດທຶນນິຍົມ ທີ່ເລັ່ງໃສ່ຄັບສູນຫລ່ຽງຕ່ຳສຸດກໍ່ແມ່ນຮັດ
ໃຫ້ລັດໂຊວຽດອ່ອນເພຍຊຸດໂຊມລົງ.

ຢູ່ໃນສະພາບແວດລ້ອມຄືແນວນີ້ ມັນຮຽກຮ້ອງໃຫ້ດຳເນີນການຫັນປ່ຽນ -
ເປັນອຸດສາຫະກຳສັງຄົມນິຍົມດ່ວຍຈັງຫວະອັນວ່ອງໄວ. ບັນດາທ່າດີເລີດຂອງ
ລະບົບເສດຖະກິດສັງຄົມນິຍົມ ແລະ ຈຸດພິເສດຂອງວິທີການຫັນປ່ຽນເປັນ ອຸດ
ສາຫະກຳສັງຄົມນິຍົມ-ທັງໝົດນີ້ໄດ້ຊີ້ບອກໃຫ້ເຫັນວ່າ ມີຄວາມອາດສາມາດທີ່
ຈະດຳເນີນການຫັນປ່ຽນເປັນອຸດສາຫະກຳດ່ວຍຈັງຫວະອັນວ່ອງໄວໄດ້. ການ
ມີຖານະເປັນເຈົ້າຄອບຄອງກຳມະສິດລວມໝູ່ແບບສັງຄົມນິຍົມ ກຽວກັບພາຫະ
ນະການຜະລິດ ເປັນຂໍ້ສະດວກ ໃນການດຳເນີນການຫັນປ່ຽນ ເປັນອຸດສາຫະ
ກຳຢູ່ ສ.ສ.ສ.ຊ ໂດຍເລີ່ມຈາກການເສີມຂະຫຍາຍອຸດສາຫະກຳໜັກຢ່າງບໍ່
ຕ້ອງເລີ່ມຈາກອຸດສາຫະກຳເບົາ ດັ່ງໄດ້ເຄີຍເຮັດກັນມາຢູ່ໃນບັນດາປະເທດ
ທຶນນິຍົມ. ລະບົບເສດຖະກິດສັງຄົມນິຍົມ ໄດ້ສ້າງເງື່ອນໄຂໃຫ້ມີ ຄວາມສາ-
ມາດຊຸດຄົ້ນເອົາໜົດທຸກຄວາມອາດສາມາດທີ່ບົ່ມຊ້ອນ ອອກມາໃຊ້ເຂົ້າ ໃນ
ການເສີມຂະຫຍາຍກ່ອນອື່ນໝົດ ອຸດສາຫະກຳໜັກຂະໜາດໃຫຍ ແບບ ໃຊ້
ເຄື່ອງຈັກເຄື່ອງລາງ.

ລາຍໄດ້ຈາກອຸດສາຫະກຳທີ່ໄດ້ຖືກໂອນເອົາມາເປັນຂອງລັດ, ຈາກການ
ກະສິກຳ, ຈາກການຄ້າຕ່າງປະເທດ ແລະ ການຄ້າພາຍໃນ, ຈາກ ລະບົບ
ທະນາຄານ ລ້ວນແຕ່ເປັນບໍ່ເກີດອັນຕົ້ນຕໍແຫ່ງທຶນຮອນ ເພື່ອມາຮັບໃຊ້ການຫັນ
ປ່ຽນເປັນອຸດສາຫະກຳຢູ່ ສ.ສ.ສ.ຊ. ບໍ່ເກີດແຫ່ງການສະສົມພາຍໃນ ທັງ
ໝົດເຫລົ່ານີ້ ໄດ້ເຮັດໃຫ້ ເກີດມີທຶນຮອນເປັນຕ່ຽບ ອັນເປັນເງື່ອນໄຂ ໃຫ
ແກ່ຄວາມສາມາດລົ່ງທຶນກ້ອນໃຫຍ່ເຂົ້າໃນອຸດສາຫະກຳເປັນຕົ້ນກໍ່ແມ່ນເຂົ້າໃນ
ອຸດສາຫະກຳໜັກ.

ໃນຊົ່ວໄລຍະ ການປະຕິບັດແຜນການຫ້າປີ ໃນສະໄຫມກ່ອນສົງຄາມ(ປີ ຈມ๘ມ-ຈມ๔ຈ)ໄດ້ມີການກໍ່ສ້າງຂະແຫນງການອຸດສາຫະກຳຂະແຫນງ ໃຫມ່ຊົ່ນ: ຂະແຫນງການອຸດສາຫະກຳຜະລິດລົດໄຖນາ, ຂະແຫນງການອຸດສາ-ຫະກຳຜະລິດລົດ, ຂະແຫນງການອຸດສາຫະກຳຄະມີສາດ, ຂະແຫນງການອຸດ ສາຫະກຳຜະລິດແມ່ຈັກ, ຂະແຫນງການອຸດສາຫະກຳຜະລິດເຮືອບິນແລະອື່ນໆ. ໂຮງຈັກໂຮງງານເປັນພັນໆແຫ່ງໄດ້ເລີ່ມຕົ້ນທຳການຜະລິດ. ຢູ່ໃນວິສາຫະກິດ ແຫ່ງໃຫມ່ ໄດ້ມີການຜະລິດຜະລິດຕະພັນອຸດສາຫະກຳພາກສ່ວນໃຫຍ່ຢູ່ພາຍໃນ ປະເທດ.

ພາຍຫລັງທີ່ໄດ້ມີການປະຕິບັດໂຄງການຫັນປ່ຽນເປັນອຸດສາຫະກຳຢ່າງມີ-ຜົນສຳເລັດແລ້ວ ພຽງແຕ່ໃນໄລຍະການປະຕິບັດແຜນການຫ້າປີ ໃນ ສອງຄັ້ງ ທຳອິດ (ຈມ๘ມ-ຈມຂກ) ສ.ສ.ສ.ຊ ກໍ່ໄດ້ຫັນປ່ຽນຈາກປະເທດຫລ້າຫລັງທີ່ ມີການກະສິກຳເປັນພື້ນຖານມາເປັນມະຫາອຳນາດທີ່ເຂັ້ມແຂງ ທາງດ້ານ ອຸດ ສາຫະກຳຫນັກ ແລະ ກໍ່ມີຄວາມເປັນເອກະລາດຢ່າງສົມບູນ ທາງດ້ານເສດ-ຖະກິດ ໂດຍບໍ່ຂຶ້ນກັບພວກປະເທດທຶນນິຍົມ ແລະ ພ້ອມກັນນີ້ ປະເທດຊາດ ກໍ່ ໄດ້ມີການຮັບປະກັນທາງດ້ານກຳລັງປ້ອງກັນຊາດ. ອັດຕາສ່ວນຂອງອຸດສາຫະ ກຳຫນັກຢູ່ໃນຜະລິດຕະພັນລວມຍອດຂອງປະເທດ ໄດ້ເພີ່ມຂຶ້ນຈາກ ๔๘,๑ % ໃນປີ ຈມຈຂ ເຖິງ ກກ,๔% ໃນປີ ຈມຂກ. ມາຮອດໄລຍະທ້າຍຂອງ ແຜນ ການຫ້າປີເທື່ອທີສອງ ສ.ສ.ສ.ຊ ໄດ້ເປັນອັນດັບທີຫນຶ່ງຢູ່ເອີລົບ ແລະ ເປັນ ອັນດັບທີສອງຢູ່ໃນໂລກທາງດ້ານບໍລິມາດການຜະລິດອຸດສາຫະກຳ.

ການຂະຫຍາຍຕົວຢ່າງມີຜົນສຳເລັດ ຂອງຂະບວນການຫັນປ່ຽນເປັນ ອຸດ ສາຫະກຳຢູ່ ສ.ສ.ສ.ຊ ໄດ້ເປັນການລົບລ້າງຂໍ້ຂັດແຍ່ງລະຫວ່າງອຳນາດ - ທາງດ້ານການເມືອງ ທີ່ກ້າວຫນ້າກວ່າຫມູ່ ຢູ່ໃນໂລກກັບພື້ນຖານອັນຫລ້າຫລັງ ທາງດ້ານເສດຖະກິດ ແລະ ເຕັກນິກເຊິ່ງໄດ້ສືບທອດມາຈາກປະເທດລັດເຊຍ ໃນສະໄຫມພະເຈົ້າຊາ. ການຫັນປ່ຽນເປັນອຸດສາຫະກຳຢູ່ ສ.ສ.ສ.ຊ ແມ່ນ ວິລະກຳອັນຍິ່ງໃຫຍ່ຂອງຊົນຊັ້ນກຳມະກອນ ແລະ ຂອງປະຊາຊົນທັງຫມົດຊາດ ທີ່ໄດ້ພາກັນຕື່ນຕົວອົດທຸກອົດຍາກເພື່ອແກ່ດຶງເອົາປະເທດຊາດອອກຈາກ ບວກ ສະຫນົມແຫ່ງຄວາມຫລ້າຫລັງໂດຍບໍ່ເສຍດາຍເຫື່ອແຮງ ແລະ ພາຫະນະ ທຶນ ຮອນໃດໆເລີຍ. ບົດຮຽນໃນການຫັນປ່ຽນເປັນອຸດສາຫະກຳມີຄວາມຫມາຍສຳ

ຄົນອັນໃຫຍ່ຫລວງສຳລັບໝົດທຸກປະເທດສັງຄົມນິຍົມ. ຢູ່ໃນປະເທດດ່ຳກ່ວານີ້ ເງື່ອນໄຂທາງດ້ານປະຫວັດສາດໃນການຫັນປ່ຽນເປັນອຸດສາຫະກຳ ມີຄວາມ ແຕກຕ່າງກັນ ແລະ ທັງມີຄວາມສະດວກກວ່າເງື່ອນໄຂຂອງ ສ.ສ.ສ.ຊ ໃນ ເວລານັ້ນ. ບັນດາປະເທດດ່ຳກ່ວານີ້ ແມ່ນອີງໃສ່ການຊ່ວຍເຫລືອຢ່າງ ຮອບ ດ້ານຂອງສະຫະພາບໂຊວຽດ ແລະ ບັນດາປະເທດສັງຄົມນິຍົມອື່ນໆ ທີ່ ຂະ ຫຍາຍຕົວທາງດ້ານອຸດສາຫະກຳຫນັກ ອັນນັ້ນໄດ້ເປັນເງື່ອນໄຂໃຫ້ຂະບວນ ວິ ວັດແຫ່ງການເສີມຂະຫຍາຍການຫັນປ່ຽນເປັນອຸດສາຫະກຳຢູ່ໃນປະເທດດ່ຳ - ກ່ວານີ້ຫລຸດຜ່ອນຄວາມຫນັກຫນ່ວງ ແລະ ຂະຫຍາຍຕົວໄປໄວກ່ວາເກົ່າ.

ການດັດສ້າງສັງຄົມນິຍົມ ຕໍ່ການກະສິກຳ

ໜຶ່ງໃນບັນດາວຽກງານອັນທຳອິດຂອງ ອຳ ນາດການປົກຄອງຂອງຊົນຊັ້ນກຳມາຊີບຢູ່ໃນ ບັນດາປະເທດທີ່ໄດ້ກ້າວຂ້ຶນໄປຕາມ ເສັ້ນ ທາງສັງຄົມນິຍົມ ກໍ່ແມ່ນການປະຕິບັດການປະຕິຮູບທີ່ດິນດ້ວຍວິທີການຍຶດເອົາ-ດິນຄອນນຳພວກຊຸດຮີດ ແລະ ນຳເອົາໄປມອບໃສ່ມືຂອງພວກຊາວນາຜູ້ອອກ-ແຮງງານ.

ໃນເວລາຄົ້ນຄ້ວາວາງໂຄງການກະສິກຳຂອງພັກກອມມູນິດ ອອກມາ ນັ້ນ ອ.ອິ.ເລນິນ ໄດ້ຫລິ້ງເຫັນລ່ວງໜ້າແລ້ວວ່າ ການປະຕິຮູບທີ່ດິນຢູ່ໃນປະເທດ ຕ່າງໆອາດສາມາດຈະດຳເນີນໄປໄດ້ທັງດ້ວຍວິທີການໂອນເອົາດິນຄອນ ທັງ ໝົດມາເປັນຂອງລັດ ກໍ່ດ້ວຍວິທີການນຳເອົາດິນຄອນໄປມອບໃຫ້ເປັນກຳມະ ສິດສ່ວນຕົວຂອງພວກຊາວນາ. ການຄາດຄະເນລ່ວງໜ້າດັ່ງກ່ວານີ້ຂອງ ອ. ອິ.ເລນິນ ໄດ້ປະກົດຜົນເປັນຈິງຢ່າງເຕັມເມັດເຕັມຫນ່ວຍ.

ພາຍຫລັງທີ່ການປະຕິວັດສັງຄົມນິຍົມໄດ້ຮັບໄຊຊະນະແລ້ວ ຢູ່ ສ.ສ.ສ.ຊ ກໍ່ໄດ້ມີການໂອນເອົາດິນຄອນທັງໝົດມາເປັນຂອງລັດໂລດ. ໄດ້ມີ ການມອບ ດິນຄອນໃຫ້ພວກຊາວນານຳໃຊ້ຕະຫລອດການ ລະນານຢ່າງບໍ່ຄິດຄ່າ ແຕ່ລັດ ຍັງ ເປັນເຈົ້າຂອງດິນຄອນດ່ັງກ່ວານັ້ນຢູ່. ຢູ່ໃນປະເທດສັງຄົມນິຍົມອື່ນໆ ກໍ່ໄດ້ ມີ ການຍຶດເອົາດິນຄອນນຳພວກເຈົ້າທີ່ດິນໃຫຍ່. ພາກສ່ວນໃຫຍ່ຂອງດິນຄອນ ທີ່ ຖືກຍຶດມານັ້ນກໍ່ໄດ້ມີການຖືກມອບໃຫ້ເປັນກຳມະສິດສ່ວນຕົວ ຂອງພວກຊາວນາ. ມີພຽງແຕ່ດິນຄອນບ່ອນໃດທີ່ມີການຈັດຕັ້ງວິສາຫະກິດຂອງລັດເທ່ົານັ້ນ ທີ່ ຖືກ

ໂອນເອົາມາເປັນຂອງລັດ.

ແຕ່ເຖິງຢ່າງໃດກໍ່ດີ ທັງການໂອນເອົາດິນດອນມາເປັນຂອງລັດ ແລະ ກໍ່ທັງການນຳເອົາດິນດອນໄປແບ່ງປັນໃຫ້ພວກຊາວນານັ້ນ ໃນຕົວມັນເອງ ແລ້ວກໍ່ບໍ່ພາໄປເຖິງບ່ອນຈະເກີດມີການພົວພັນແຫ່ງການຜະລິດແບບສັງຄົມນິຍົມຢູ່ຊົນນະບົດໄດ້.

ພາຍຫລັງທີ່ໄດ້ມີການປະຕິຮູບທີ່ດິນແລ້ວ ຮູບການການຜະລິດທີ່ມີລັກສະນະເປັນເຈົ້າຄອບຄອງຢູ່ຊົນນະບົດກໍ່ຍັງຄົງສືບຕໍ່ແມ່ນຮູບການການຜະລິດນ້ອຍແບບເອກະເທດຂອງພວກຊາວນາ. ສະເພາະສັງຄົມນິຍົມນັ້ນ ມັນຊຳໍ້ພັດວາງຄາດຫມາຍໃຫ້ມີການຫັນປ່ຽນພາຫະນະການຜະລິດໄປເປັນຂອງສັງຄົມ ບໍ່ສະເພາະພຽງແຕ່ຢູ່ໃນອຸດສາຫະກຳເທົ່ານັ້ນ ແຕ່ກໍ່ຍັງຕ້ອງຫັນປ່ຽນຢູ່ໃນການກະສິກຳອີກ. ຄວາມຈຳເປັນໃນການກ້າວຂຶ້ນໄປຫາການຜະລິດໃຫຍ່ສັງຄົມນິຍົມຢູ່ໃນການກະສິກຳ ແມ່ນເກີດຈາກບ່ອນທີ່ວ່າ ສັງຄົມນິຍົມແມ່ນຈະກໍ່ສ້າງຂຶ້ນຢູ່ບົນພື້ນຖານ ຄ ອັນທີ່ກົງກັນຂ້າມນຳກັນຄື: ບົນພື້ນຖານອຸດສາຫະກຳສັງຄົມນິຍົມຂະຫນາດໃຫຍ່ ແລະ ບົນພື້ນຖານເສດຖະກິດການຜະລິດຂະຫນາດນ້ອຍ ແບບກະແຈກກະຈາຍ ແລະຫລ້າຫລັງຂອງຊາວນາ ແມ່ນບໍ່ໄດ້ຢ່າງເດັດຂາດ. ການຜະລິດກະສິກຳ ແບບດັ່ງກ່າວນີ້ ແມ່ນຜະລິດສິນຄ້າໄດ້ຫນ້ອຍທີ່ສຸດ ເນື່ອງຈາກວ່າສະມັດຖະ - ພາບແຮງງານຢູ່ບ່ອນຫັ້ນແມ່ນຕຳ່ທີ່ສຸດ. ລັກສະນະກະແຈກກະຈາຍຂອງ ການຜະລິດນ້ອຍຂອງຊາວນາ ເປັນສິ່ງກີດຂວາງ ການຫມູນໃຊ້ເຄື່ອງຈັກ ແລະ ເຕັກນິກປູກຝັງອັນທັນສະໄຫມເຂົ້າໃນການຜະລິດກະສິກຳ. ຢູ່ໃນສະພາບ ຄື ແນວນີ້ ແມ່ນບໍ່ມີຄວາມສາມາດຮັບປະກັນໃຫ້ປະຊາຊົນຢູ່ໃນຕົວເມືອງອຸດສາຫະກຳທີ່ພວມຂະຫຍາຍຕົວກວ້າງຂວາງອອກໄປນັ້ນ ມີສະບຽງອາຫານເປັນ ຈຳນວນພຽງພໍໄດ້ ແລະ ສະເພາະອຸດສາຫະກຳແລ້ວ ກໍ່ແມ່ນບໍ່ມີຄວາມສາມາດທີ່ຈະຮັບປະກັນໄດ້ກ່ຽວກັບວັດຖຸດິບທີ່ມາຈາກການກະສິກຳ, ນອກຈາກນີ້ມັນກໍ່ຍົກລະດັບຄວາມຢູ່ດີກິນດີຂອງກະໂຕຊົນຊັ້ນຊາວນາເອງຂຶ້ນບໍ່ໄດ້ຢ່າງຫລວງຫລາຍເຊັ່ນດຽວກັນ.

ແມ່ນ ເລນິນ ທີ່ເປັນຜູ້ຄົ້ນພົບບັນດາເສັ້ນທາງ ແລະ ວິທີການດຳເນີນການດັດສ້າງສັງຄົມນິຍົມຕໍ່ການກະສິກຳບົນພື້ນຖານການຫັນປ່ຽນເປັນສະຫະ - ກອນ. ວ.ອີ.ເລນິນ ໄດ້ອະທິບາຍກ່ຽວກັບຄວາມແຕກຕ່າງກັນ ໂດຍພື້ນຖານ

ທີ່ລັກສະນະຫລັກການລະຫວ່າງການຫັນເປັນລ່ອມໝູ ຢູ່ໃນເງື່ອນໄຂຂອງຜະ
ເດັດການຂອງອຸມັ້ນກຳມາຊີບ ກັບອັນທີ່ມີຢູ່ໃນເງື່ອນໄຂຂອງທຶນນິຍົມ ໂດຍ
ໄດ້ຊີ້ ອອກໃຫ້ເຫັນວ່າ ການເຕີບໃຫຍ່ຂະຫຍາຍຕົວຂອງການຫັນເປັນລອມໝູ
ພາຍໃຕ້ລະບອບຜະເດັດການ ຂອງອຸມັ້ນກຳມາຊີບ ແລະ ກຳມະສິດຂອງລັດ
ກ່ຽວກັບພາຫະນະການຜະລິດອັນສຳຄັນທີ່ສຸດນັ້ນ ແມ່ນເທົ່າທຽມກັນກັບ ການ
ເຕີບໃຫຍ່ຂະຫຍາຍຕົວຂອງສັງຄົມນິຍົມ. ການກ້າວມັ້ນສູ່ການຜະລິດໃຫຍ່ແບບ
ສະຫະກອນຂອງພວກຊາວນາ ໄດ້ເປີດໂອກາດໃຫ້ນຳເອົາເຄື່ອງຈັກເຕັກນິກ-
ອັນໃໝ່ໄປປະກອບໃຫ້ການກະສິກຳ. ໃນເວລາດຽວກັນນີ້ ການຫັນເປັນລອມ
ໝູ ແມ່ນຮູບການກໍ່ສ້າງສັງຄົມນິຍົມ ຢູ່ຊຸມນະບົດແນວໜ້າທີ່ເຮັດໃຫ້ອຸມັ້ນ -
ຊາວນາທັງໝົດສາມາດເຂົ້າຮ່ວມນຳໄດ ຕະຫລອດຮອດພວກຊາວນາທີ່ທຸກຈົນ
ກວ່າໝູ. ຈາກນັ້ ອ.ອ.ເລນິນ ຈຶ່ງໄດ້ກຳນົດເອົາບັນຫາ ການເປີດກວ້າງ
ຢ່າງສຸດຂີດຂະບວນການຫັນປ່ຽນເປັນສະຫະກອນຂອງອຸມັ້ນຊາວນານັ້ນ ມາ
ເປັນໜ້າທີ່ອັນສຳຄັນຍິ່ງ ໃນການກໍ່ສ້າງສັງຄົມນິຍົມ.

ອ.ອ.ເລນິນ ໄດ້ຊີ້ອອກໃຫ້ເຫັນວ່າ ຄວນຈະຕ້ອງໃຊ້ວິທີການອັນໃດ ແດ
ເພື່ອຈະດຳເນີນການດັດສ້າງສັງຄົມນິຍົມຕໍ່ການກະສິກຳບົນພື້ນຖານ ການຫັນ
ປ່ຽນເປັນສະຫະກອນ. ທ່ານໄດ້ຢັ້ງຢືນຄວາມສົມເຫດສົມຜົນຂອງຫລັກການສະ
ໝັກໃຈທີ່ເວົ້າວ່າ ມັນເປັນໄປບໍ່ໄດ້ຢ່າງເດັດຂາດ ທີ່ຈະໄປບີບບັງຄັບໃຫ້ຊາວ
ນາປະຕິບັດໄປຕາມຮູບການເຄື່ອນໄຫວເສດຖະກິດແບບສັງຄົມນິຍົມ ແລະ ມັນ
ກໍ່ເປັນໄປບໍ່ໄດ້ຢ່າງເດັດຂາດທີ່ຈະເກີດມີຂະບວນຫັນປ່ຽນເປັນສະຫະກອນ ໄດ
ຈາກການອອກຄຳສັ່ງທາງບໍລິຫານ.

ຫລັກການອັນສຳຄັນໃນການປະຕິບັດແຜນການ ເລນິນ ກ່ຽວກັບການ ຫັນ
ປ່ຽນເປັນສະຫະກອນແມ່ນຫລັກການດຳເນີນການຫັນປ່ຽນເປັນສະຫະກອນແບບ
ເປັນຂັ້ນໆ ໂດຍເລີ່ມຈາກຮູບການອັນງ່າຍດາຍສຸດກ່ອນ ຈາກການຫັນເປັນ -
ລອມໝູທາງດ້ານການຊົມໃຊ, ດ້ານການສະໜອງ, ແລະຈຳໜ່າຍ, ການ
ສືບເຊື່ອໄປຫາສະຫະກອນການຜະລິດຂັ້ນງ່າຍດາຍສຸດ, ຈາກສະຫະກອນການ
ຜະລິດຂັ້ນງ່າຍດາຍສຸດ ໄປຫາການຫັນເປັນລອມໝູແບບສັງຄົມນິຍົມ-ນັ້ນເສັ້ນ
ທາງກ້າວເດີນໄປສູ່ສັງຄົມນິຍົມຂອງຊາວນາ.

ການຂະຫຍາຍຕົວຂອງຮູບການຫັນເປັນລອມໝູແບບງ່າຍດາຍສຸດ ຢູ່ໃນ

ການສະຫນອງ, ການຈຳຫນ່າຍ ແລະ ການສົນເຊື່ອ, ບົດຮຽນອັນເປັນ ປະ ໂຫຍດຊຶ່ງໄດ້ມາຈາກການເຄື່ອນໄຫວວຽກງານຂອງສະຫະກອນລວມຫມູ່ ແລະ ນິຄົມຂອງລັດ ບ່ອນທຳອິດ-ທັງຫມົດເຫລົ່ານີ້ໄດ້ສະແດງໃຫ້ພວກຊາວນາ ເຫັນ ໄດ້ໃນພາກຕົວຈິງ ບັນດາທ່າດີເລີດຂອງການຜະລິດໃຫຍ່ສັງຄົມນິຍົມຢູ່ ໃນ ການປູກຝັງ ແລະ ກໍ່ໄດ້ເປັນການຝຶກແອບໃຫ້ພວກເຂົາເຈົ້າຮູ້ຈັກດຳເນີນການ ຜະລິດແບບລວມຫມູ່.

ເງື່ອນໄຂອັນສຳຄັນຍິ່ງ ເພື່ອຮັບປະກັນຜົນສຳເລັດຂອງຂະບວນການ ຫັນ ປ່ຽນການກະສິກຳໄປເປັນສະຫະກອນ ແມ່ນການນຳພາຂອງຈົນຊັ້ນກຳມະກອນ ຕໍ່ການກໍ່ສ້າງສັງຄົມນິຍົມຢູ່ຈົນນະບົດ ແລະ ການຊ່ວຍເຫລືອ ສະຫນັບສະຫນູນ ຢ່າງສຸດຂີດຈາກລັດຂອງຈົນຊັ້ນກຳມາຊີບ. ການຊ່ວຍເຫລືອຂອງລັດ ແມ່ນສະ ແດງອອກດ້ວຍຫລາຍຮູບຫລາຍສີເຊັ່ນ: ການສະຫນອງເຄື່ອງຈັກກະສິກຳ ຊະ ນິດໃຫມ່, ການໃຫ້ສິນເຊື່ອແລະແນວປູກ ແລະ ອື່ນໆ.

ແຜນການຫັນປ່ຽນເປັນສະຫະກອນຂອງ ວ.ອີ.ເລນິນ ໄດ້ມີການປະຕິບັດ ໃຫ້ປະກົດເປັນຈິງເປັນຄັ້ງທຳອິດຢູ່ ສ.ສ.ສ.ຊ. ຍ້ອນວ່າພວກກອມມູນິດແລະ ລັດໂຊວຽດ ໄດ້ມີການດຳເນີນວຽກງານສຶກສາອົບຮົມ ແລະ ຈັດຕັ້ງຢ່າງໃຫຍ່ ຫລວງ ດັ່ງນັ້ນໃນທ້າຍປີ ๑๗๘๗ ຢູ່ ສ.ສ.ສ.ຊ. ຈຶ່ງໄດ້ເກີດມີບາດລ້ຽວ - ຢ່າງເຖິງກົກເຖິງຮາກຂອງຈົນຊັ້ນຊາວນາໄປຫາເບື້ອງສະຫະກອນລວມ ຫມູ່ (ນາລວມ). ມວນຈົນຊາວນາສ່ວນພື້ນຖານ ໄດ້ພາກັນເຂົ້າເປັນສະມາຊິກ-ນາລວມ. ບົນພື້ນຖານການຫັນເປັນລວມຫມູ່ ພວກຮັ່ງມີໄດ້ຖືກຕັດບໍ່ໃຫ້ມີພາຫະ ນະແຫ່ງການຜະລິດ. (ນັ້ນກໍ່ຄືພວກຊາວນາຮັ່ງມີ ທີ່ໃຊ້ແຮງງານຮັບຈ້າງ-ຈົນ ຊັ້ນນາຍທຶນ). ພວກນີ້ແມ່ນພາກສ່ວນຈົນຊັ້ນຂູດຮີດຢູ່ຈົນນະບົດທີ່ມີຈຳນວນຫຼວງ ຫລາຍກວ່າຫມູ່.

ການຫັນເປັນລວມຫມູ່ ໄດ້ສ້າງໃຫ້ອຳນາດໂຊວຽດມີພື້ນຖານສັງຄົມນິຍົມຢູ່ ໃນການກະສິກຳທີ່ເປັນຂະແຫນງການອັນຫນຶ່ງ ຂອງເສດຖະກິດແຫ່ງຊາດ ຊຶ່ງ ບໍ່ພຽງແຕ່ກວ້າງໃຫຍ່ໄພສານທີ່ສຸດ ແລະ ມີຄວາມຈຳເປັນອັນເປັນຕາຍເທົ່າ-ນັ້ນ ແຕ່ມັນພັດຍັງແມ່ນຂະແຫນງການທີ່ຫລ້າຫລັງກວ່າຫມູ່ອີກ. ການກະສິກຳ ໄດ້ເລີ່ມມີການຂະຫຍາຍຕົວບົນພື້ນຖານຊະນິດຄ້າຍຄືກັນກັບອຸດສາຫະກຳຄື ບົນ ພື້ນຖານກຳມະສິດລວມຫມູ່ສັງຄົມນິຍົມ ກ່ຽວກັບພາຫະນະການຜະລິດ.ພາຍໃຕ້

ການນຳພາຂອງພັກກອມມູນິດ ແລະ ໂດຍໄດ້ຮັບການຊ່ວຍເຫລືອສະຫນັບ ສະ ຫນູນຢ່າງສູດຂີດ ຈາກຊົນຊັ້ນກຳມະກອນນັ້ນ ຊົນຊັ້ນຊາວນາຢູ່ ສ.ສ.ສ.ຊ . ໄດ້ພາກັນກ້າວຂຶ້ນໄປຕາມເສັ້ນທາງສັງຄົມນິຍົມ.

ຮູບການຕົ້ນຕໍໃນການດຳເນີນເສດຖະກິດແບບລວມຫມູ່ຢູ່ ສ.ສ.ສ.ຊ.ໄດ້ ແກ່ສະຫະກອນກະເສດ ຫມາຍຄວາມວ່າ ແມ່ນຮູບການຫນຶ່ງໃນການດຳເນີນ-ເສດຖະກິດແບບລວມຫມູ່ທີ່ຕັ້ງຢູ່ບົນພື້ນຖານການຫັນປ່ຽນເອົາ ພາຫະນະ ການ ຜະລິດອັນຕົ້ນຕໍຂອງພວກຊາວນາມາເປັນຂອງສັງຄົມ ແລະ ການອອກແຮງ - ງານແບບລວມຫມູ່ ໂດຍມີການຮັກສາເສດຖະກິດສຳຮອງ ສ່ວນຕົວຂອງ ພວກ ສະມາຊິກນາລວມໃນເວລາດຽວກັນນັ້ນ. ສະຫະກອນກະເສດ ແມ່ນຮັບປະກັນ ໃຫ້ມີການປະສານສົມທົບຢ່າງຖືກຕ້ອງລະຫວ່າງສິດຜົນປະໂຫຍດສ່ວນຕົວ ຂອງ ພວກສະມາຊິກນາລວມ ກັບສິດຜົນປະໂຫຍດສ່ວນລວມ ແລະ ມັນກໍ່ເປັນ ການ ປະກອບສ່ວນຢ່າງມີຜົນດີໃຫ້ແກ່ການເສີມຂະຫຍາຍກຳລັງການຜະລິດໃນ ການ ກະສິກຳ.

ການຫັນກະສິກຳເປັນ ສະຫະກອນຢູ່ ສ.ສ.ສ.ຊ. ໄດ້ເປີດໂອ ກາດ ໃຫ້ສາມາດກໍ່ສ້າງການກະສິກຳສັງຄົມນິຍົມ ທີ່ມີຂະ້ຫນາດໃຫຍ່ໂຕກວ່າຫມູ່ຢູ່ໃນ ໂລກ ແລະ ໂດຍອີງໃສ່ເຕັກນິກທັນສະໄຫມ ພາຍໃນໄລຍະເວລາບໍ່ພໍເທົ່າໃດ ປີ ແລະ ກໍ່ໄດ້ເຮັດໃຫ້ປະເທດຊາດມີຜະລິດຕະພັນທີ່ເປັນສິນຄ້າຫລາຍກວ່າ - ເກົ່າອີກ. ເປັນການເປີດເສັ້ນທາງໃຫ້ແກ່ການຍົກລະດັບການຢູ່ດີກິນດີຂອງຊົນ ຊັ້ນຊາວນາລວມຫມູ່ຂຶ້ນຢ່າງເດັ່ນຊັດ.

ການກ້າວຂຶ້ນສູ່ການຜະລິດໃຫຍ່ ສັງຄົມນິຍົມຂອງຊົນນະບົດໂຊວຽດບົນພື້ນ ຖານແຜນການເລນິນ ກ່ຽວກັບການຫັນປ່ຽນເປັນສະຫະກອນ ແມ່ນຫມາຍເຖິງ ການປະຕິວັດອັນຍິ່ງໃຫຍ່ ໃນການພົວພັນທາງດ້ານເສດຖະກິດ ແລະ ຢູ່ໃນ ຊີ ວິດການເປັນຢູ່ທັງຫມົດຂອງຊົນຊັ້ນຊາວນາ. ການຫັນເປັນລວມຫມູ່ ໄດ້ເຮັດ-ໃຫ້ຊົນນະບົດຫລຸດພົ້ນອອກຈາກແອກຫນີບເຕັງຂອງພວກຮັ່ງມີ, ຈາກການແຕກ ແຍກກັນອອກເປັນຊົນຊັ້ນ, ຈາກຄວາມຫລົ້ມຈົມ ແລະ ຄວາມທຸກຍາກຢ່າງຖາ ວອນ.

ຊົນຊັ້ນຊາວນາຢູ່ໃນປະເທດສັງຄົມນິຍົມອື່ນໆ ໄດ້ພາກັນຫມູນໃຊ້ບົດ ຮຽນ ຂອງຊົນຊັ້ນຊາວນາຜູ້ອອກແຮງງານຢູ່ທີ່ສະຫະພາບໂຊວຽດ. ໃນປະຈຸບັນນີ້ ຢູ່

ໃນປະເທດສັງຄົມນິຍົມສ່ວນຫລວງຫລາຍ ກໍ່ໄດ້ສຳເລັດການດັດສ້າງສັງຄົມ ນິຍົມຕໍ່ການກະສິກຳໄປແລ້ວ.

ບົດຮຽນຂອງສະຫະພາບໂຊວຽດ ແລະ ຂອງປະເທດສັງຄົມນິຍົມອື່ນໆໄດ້ຊຸ້ໃຫ້ເຫັນວ່າ ບັນດາຫລັກການພື້ນຖານຂອງແຜນການເລນິນ ກ່ຽວກັບການຫັນປ່ຽນເປັນສະຫະກອນ ລວມແຕ່ຍັງມີຄຸນຄ່າສຳລັບແຕ່ລະປະເທດ ທີ່ໄດ້ກ້າວໄປຕາມເສັ້ນທາງສັງຄົມນິຍົມ. ພ້ອມກັນນີ້ ຢູ່ໃນປະເທດສັງຄົມນິຍົມໃດໜຶ່ງ ສະເພາະມັນກໍ່ອາດຈະມີຈຸດພິເສດສະເພາະ ຂອງໃຜລາວ ໃນການດຳເນີນການຫັນປ່ຽນການຜະລິດກະສິກຳມາເປັນສະຫະກອນ. ຕົວຢ່າງກໍ່ຜ່ານການດັດ - ສ້າງສັງຄົມນິຍົມ ຕໍ່ການກະສິກຳຢູ່ໃນບັນດາປະເທດສັງຄົມນິຍົມ ບ່ອນໃດທີ່ໄດ້ປະຕິບັດການແບ່ງປັນດິນດອນໃຫ້ເປັນກຳມະສິດຂອງພວກຊາວນານັ້ນ ມັນກໍ່ໄດ້ເກີດມີຮູບການຫັນປ່ຽນເປັນສະຫະກອນແນວໜຶ່ງ ທີ່ບໍ່ໄດ້ຮັບການແຜ່ຂະຫຍາຍຢູ່ ສ.ສ.ສ.ຊ. ຢູ່ໃນສະຫະກອນດັ່ງກ່າວນີ້ ດິນດອນຍັງຄົງຮັກສາໄວ້ເປັນກຳມະສິດຂອງພວກຊາວນາ ທີ່ເປັນສະມາຊິກຂອງສະຫະກອນຢູ່ແຕ່ການແຈກຢາຍລາຍ ໄດ້ເຮັດໄປ ບໍ່ສະເພາະພຽງແຕ່ອີງຕາມແຮງງານເທົ່ານັ້ນ ແຕ່ພັດ ຍັງອີງໃສ່ຈຳນວນ ແລະ ຄຸນນະພາບຂອງດິນດອນທີ່ໄດ້ມອບໃຫ້ສະຫະກອນນັ້ນ.

ໂດຍໝູນໃຊ້ບັນດາຫລັກມູນພື້ນຖານຂອງແຜນການ ເລນິນ ກ່ຽວກັບການຫັນປ່ຽນເປັນສະຫະກອນຢ່າງມີຫົວຄິດປະດິດສ້າງ ເຂົ້າໃນສະພາບເງື່ອນ ໄຂ ລະອຽດຕົວຈິງຢູ່ໃນປະເທດຂອງຕົນນັ້ນ ບັນດາພັກກອມມູນິດ ແລະ ພັກກຳມະກອນ ກໍ່ໄດ້ປະກອບສ່ວນຂອງຕົນ ເຂົ້າໃນການພັນຂະຫຍາຍທິດສະດີມາກ-ເລນິນ ແລະ ທັງເຮັດໃຫ້ທິດສະດີດັ່ງກ່າວນີ້ ຊຸດົ່ມຮັ່ງມີຂຶ້ນ ດ້ວຍບົດຮຽນ ໃນການກໍ່ສ້າງສັງຄົມນິຍົມ.

ການດຳເນີນການປະຕິວັດ ໃນດ້ານວັດທະນະທຳ	ການຂະຫຍາຍວັດທະນະທຳຂອງມວນຊົນ-ຢ່າງກ້ວາງຂວາງຕາມແໜ້ນ ຢູ່ໃນບັນດາ ປະເທດສັງຄົມນິຍົມ ແມ່ນເກີດຈາກກະໂຕ

ທາດແທ້ຂອງສັງຄົມນິຍົມນັ້ນເອງ. ອ.ອ.ເລນິນ ໄດ້ເວົ້າວ່າ ໜ້າທີ່ຂອງສັງຄົມນິຍົມ ແມ່ນຢູ່ບ່ອນວ່າ ຈະຕ້ອງນຳເອົາໜາກຜົນທັງໝົດຂອງວັດທະນະທຳທີ່ຍາດມາໄດ້ນັ້ນ ມາຮັບໃຊ້ສິດຜົນປະໂຫຍດຂອງຊາວຜູ້ອອກແຮງງານ.ປະຊາ

ຊຸມຊາວຜູ້ອອກແຮງງານ ພາກັນລຸກຂຶ້ນຍົດອຳນາດມາເປັນຂອງຕົນ ເພື່ອແນໃສ່-ຮັບປະກັນໃຫ້ຕົນໄດ້ເຂົ້າໄປເຖິງຄວາມອຸດົມຮັ່ງມີທັງໝົດ ທາງດ້ານວັດຖຸແລະຈິດໃຈ.

ພ້ອມກັນນີ້ ກະໂຕຄວາມຮຽກຮ້ອງຕ້ອງການຂອງການພະລິດສັງຄົມນິຍົມ-ນັ້ນເອງ ຊຳພັດຮຽກຮ້ອງໃຫ້ມີຄວາມຈຳເປັນທີ່ຈະຕ້ອງຍົກລະດັບວັດທະນະທຳ ແລະ ການສຶກສາຂອງຊາວຜູ້ອອກແຮງງານຂຶ້ນສູງຢ່າງສຸດຊຶ້ງ. ເພື່ອ ຢາ: ເສີມຂະຫຍາຍການພະລິດສັງຄົມນິຍົມໄດ ມັນຈຳເປັນທີ່ຈະຕ້ອງມີພະນັກງານຜູ້ ມີລະດັບວິຊາຊີບສູງ, ມີຄວາມຮູ ແລະ ເປັນຄົນຜູ້ມີຄວາມຕື່ນຕົວຢູ່ໃນໝົດທຸກ ຂະແໜງການຂອງເສດຖະກິດແຫ່ງຊາດ ໝາຍຄວາມວ່າ, ເມື່ອຊຶ້ນຂຶ້ນ ກຳ ມະກອນໄດ້ກຳອຳນາດມາເປັນຂອງຕົນແລ້ວ ພວກເຂົ້າກໍ່ຕ້ອງມີຄວາມເປັນຫວ-ເປັນໃຍນຳຂັ້ນຫາການຈັດຕັ້ງການສຶກສາ, ການສິດສອນ ແລະ ການສຶກ ສາ ອົບຮົມນັກກໍ່ສ້າງສັງຄົມນິຍົມ.

ລະບອບທຶນນິຍົມ ແລະ ຮ່ອງຮອຍເສດເຫລືອຂອງລະບອບສັກດິນາທີ ຍັງ ຄ້ຳຄ້າງເກາະຫ້ອຍຢູ່ນຳລະບອບທຶນນິຍົມນັ້ນ ໄດ້ປະສະພາບແຫ່ງຄວາມມືດມົນ ແລະໄພກຶກໜັ້ງສືໃນໝູ່ມະຫາຊຶ້ນໄວ້ໃຫ້ລັດສັງຄົມນິຍົມເປັນຜູ້ສືບທອດ. ຍອມ ແນວນີ້ ໃນໄລຍະເບື້ອງຕົ້ນ ຊຶ້ນຊຶ້ນກຳມາຊີບຈຶ່ງຈຳຕ້ອງໄດ້ດຳເນີນ ມາດຕາ ການປະຕິວັດອັນເດັດຂາດ ເພື່ອລຶບລ້າງໄພກຶກໜັ້ງສື ແລະ ລຶບລ້າງສະພາບ ແຫ່ງຄວາມບໍ່ມີວັດທະນະທຳຂອງຊຶ້ນຄົນຊາວຜູ້ອອກແຮງງານ ທີ່ມີຈຳນວນຫຼວງ ຫລາຍຢູ່ໃນຕົວເມືອງ ແລະ ຊຶ້ນນະບົດ. ແນນອນແນວນີ້ໆແລ້ວ ທີ່ ວ.ອ . ເລນິນ ໄດ້ເວັ້ນການລຶບລ້າງໄພກຶກໜັ້ງສື, ການວາງລະບົບການສຶກສາໂດຍ ທົ່ວໄປ, ການຈັດຕັ້ງວຽກງານອື່ນໆ ທາງດ້ານວັດທະນະທຳ ແລະ ການ ສຶກ ສາວ່າເປັນການປະຕິວັດທາງດ້ານວັດທະນະທຳ.

ໂຄງການເລນິນ ກ່ຽວກັບການປະຕິວັດໃນດ້ານວັດທະນະທຳ ເປັນການ-ປະກອບສ່ວນອັນສຳຄັນເຂົ້າໃນພາກທິດສະດີ ແລະ ພາກຕົວຈິງຂອງການປະຕິ ວັດ.

ເມື່ອໃນຂອງການປະຕິວັດທາງດ້ານວັດທະນະທຳຢູ່ບ່ອນວ່າ ມວນຊຶ້ນຊາວ ຜູ້ອອກແຮງງານເປັນຈຳນວນຫລວງຫລາຍ ໄດ້ພາກັນເປັນເຈົ້າຂອງຄວາມ ອຸ ດົມຮັ່ງມີທັງໝົດ ທີ່ມີຢູ່ໃນດ້ານວັດທະນະທຳ ຊຶ່ງເຄີຍເປັນກຳມະສິດ ຜູກຂາດ

ຂອງພວກຊົນຊັ້ນຂູດຮີດໃນເມື່ອກ່ອນ. ພາຍໃນກຳນົດເວລາປະຫວັດສາດ ອັນສັ້ນໆ ຢູ່ ສ.ສ.ສ.ຊ ກໍ່ໄດ້ມີການລົບລ້າງໄພກີກຫນັງສື ທີ່ມີລັກສະນະເປັນຂະບວນຢູ່ໃນຫມູ່ພົນລະເມືອງຜູ້ເຕັມກະສຽນ ແລະ ກໍ່ໄດ້ມີການສ້າງຕັ້ງ ລະບົບການສຶກສາແຫ່ງຊາດ. ໄດ້ມີການສ້າງຕັ້ງໂຮງຮຽນສາມັນສຶກສາ ຊຶ່ງປະກອບມີໂຮງຮຽນຊັ້ນປະຖົມ, ມັດທະຍົມ ແລະ ອຸດົມ. ຢູ່ໃນໂຮງຮຽນໄດ້ມີການຈັດຕັ້ງການສຶກສາຮຳຮຽນເປັນພາສາປະຈຳຊາດໂດຍບໍ່ຄິດຄ່າ.

ທາງດ້ານການສຶກສາຊັ້ນສູງ ແລະ ວິຊາຊີບຊັ້ນກາງກໍ່ໄດ້ມີການ ດຳເນີນວຽກງານອັນສຳຄັນເຊັ່ນດຽວກັນ, ສິ່ງດັ່ງກ່າວ ເປັນເງື່ອນໄຂໃຫ້ສາມາດສ້າງຖັນແຖວພະນັກງານເປັນຈຳນວນຫລວງຫລາຍໃນຫມູ່ປັນຍາຊົນໂຊວຽດຮຸ່ນໃຫມ່ ພາຍໃນກຳນົດເວລາອັນສັ້ນໆ. ໄດ້ມີການຈັດຕັ້ງຕາຫນ່າງສະຖາບັນ ວິທະຍາສາດອັນກວ້າງຂວາງ. ລະດັບເຕັກນິກ ແລະ ວິຊາຊີບຂອງຊົນຊັ້ນ ກຳມະກອນ ກໍ່ໄດ້ເພີ່ມຂຶ້ນຢ່າງຫລວງຫລາຍ.

ທາງດ້ານການພິມຈຳຫນ່າຍ, ດ້ານວິທະຍຸກະຈາຍສຽງ, ດ້ານໂທລະ - ພາບ ແລະ ຮູບເງົາ, ດ້ານວັດທະນະທຳ ແລະ ສິລະປະ, ດ້ານການເຜີຍ-ແຜ່ວັດທະນະທຳ ແລະ ການສຶກສາໃນຫມູ່ປະຊາຊົນ ກໍ່ໄດ້ຮັບຜົນສຳເລັດ ອັນໃຫຍ່ຫລວງ.

ການປະຕິວັດທາງດ້ານວັດທະນະທຳ ໄດ້ເຮັດໃຫ້ປະຊາຊົນຫລຸດພົ້ນ ອອກຈາກສະພາບແຫ່ງຄວາມເປັນຂ້າທາດທາງດ້ານຈິດໃຈ ແລະ ແຫ່ງຄວາມ ມືດມົນ, ເຮັດໃຫ້ປະຊາຊົນໄດ້ຮູ້ໄດ້ເຫັນຄວາມຮັ່ງມີທາງດ້ານວັດທະນະທຳທີ່ມວນມະນຸດໄດ້ສະສົມມາໄວ້. ປະເທດທີ່ມີປະຊາຊົນສ່ວນໃຫຍ່ເປັນຄົນກີກຫນັງສືໄດ້ທະຍານຂຶ້ນດ້ວຍບາດກ້າວກັນໃຫຍ່ໂຕມະໂຫລານ ໄປເຖິງຍອດສູງຂອງ ວິທະຍາສາດ ແລະ ວັດທະນະທຳ.

๔. ໄຊຊະນະຂອງສັງຄົມນິຍົມ

ການລົບລ້າງລັກສະນະຫລາຍພາກສ່ວນ
ແລະ ໄຊຊະນະ ຂອງສັງຄົມນິຍົມ

ໃນສະໄຫມຂ້າມຜ່ານຈາກ
ທຶນນິຍົມໄປຫາສັງຄົມນິຍົມ
ຢູ່ ສ.ສ.ສ.ຊ ໄດ້ມີການ

ສ້າງຕັ້ງສັງຄົມໃຫມ່ ສັງຄົມນິຍົມ ພາຍຫລັງທີ່ໄດ້ມີການດັດສ້າງແບບປະຕິວັດຢູ່ ໃນເສດຖະກິດ, ລະບອບການເມືອງ ແລະ ວັດທະນະທຳ. ໃຊຊະນະຂອງ-ສັງຄົມນິຍົມ ໄດ້ຊີ້ບອກວ່າ ກຳມະສິດລວມໝູ່ ສັງຄົມນິຍົມ ກ່ຽວກັບພາຫະນະ ການຜະລິດ ໄດ້ມາແທນທີ່ກຳມະສິດສ່ວນຕົວແລ້ວ. ພາກສ່ວນເສດຖະກິດ ສັງ ຄົມນິຍົມພາຍໃຕ້ຮູບການເປັນ ວິສາຫະກິດ ສັງຄົມນິຍົມຂະໜາດໃຫຍ່ ທີ່ໃຊ້ ກົນຈັກຢູ່ໃນຕົວເມືອງ ແລະ ຊົນນະບົດໄດ້ກາຍມາເປັນເຈົ້າຄອບຄອງ ຢ່າງ ຂາດຂັ້ນ ແທນທີ່ເສດຖະກິດຫມັ້ກສະນະຫລາຍພາກສ່ວນ, ແລະ ກໍ່ໄດ້ມີ ການ ລົບລ້າງຢ່າງສິ້ນເຊີງການຂູດຮີດຄົນດ້ວຍຄົນນຳກັນ. ແມ່ນບັນດາແຜນການ - ຂອງລັດທັງມວນ ທີ່ກຳນົດ ແລະ ຊີ້ທິດສ່ອງທາງໃຫ້ແກ່ວິວັດທັງຫມົດທາງດ້ານ ເສດຖະກິດຢູ່ໃນປະເທດ. ສັງຄົມສັງຄົມນິຍົມ ໄດ້ຫລຸດພົ້ນອອກຈາກລັກສະນະ ອະນາທິປະໄຕ ໃນການຜະລິດ ແລະ ຈາກວິກິດການຕ່າງໆຢ່າງຕະຫລອດກາ ລະນານ. ການຜະລິດຂອງສັງຄົມ ໄດ້ມີການຈັດຕັ້ງຢ່ັນເພື່ອຈຸດປະສົງຮັບປະ-ກັນໃຫ້ຄົນທັງຫມົດຢູ່ໃນສັງຄົມ ໄດ້ຢູ່ດີ ກິນດີ ຢ່າງເຕັມສ່ວນກວ່າເກົ່າ ແລະມີ ການຂະຫຍາຍຕົວຢ່າງຮອບດ້ານ ແລະ ມີວິວັດສະຫລະພາບກວ່າເກົ່າ.

ຢູ່ໃນສັງຄົມ ສັງຄົມນິຍົມ ແມ່ນມີການແຈກຢາຍລາຍໄດ້ລະຫວ່າງຜູ້ທີ່ອອກ ແຮງງານໂດຍອີງຕາມຈຳນວນ ແລະ ຄຸນນະພາບຂອງແຮງງານ ທີ່ໄດ້ປະ - ກອບເຂົ້າໃນຕົວຈິງ. ໄດ້ມີການວາງຫລັກການທີ່ວ່າ: " ເຮັດ ຕາມຄວາມສາ-ມາດ ຮຶມໃຊ້ຕາມແຮງງານ ". ອັນນີ້ແມ່ນຮັບປະກັນໃຫ້ໝົດທຸກຄົນຢູ່ໃນ ສັງ ຄົມມີຄວາມສົນໃຈ ໃນໜ້າທີ່ຜົນຂອງການອອກແຮງງານ ຂອງຕົນ ແລະ ກໍ່ ສ້າງເງື່ອນໄຂເພື່ອປະສານສົມທົບສົດຜົນປະໂຫຍດຂອງສ່ວນບຸກຄົນ ກັບສົດຜົນ ປະໂຫຍດຂອງສ່ວນລວມ, ເປັນປັດໃຈປຸກລະດົມສິ່ງເສີມຢ່າງໃຫຍ່ຫລວງ ໃຫ ຍົກສູງສະມັດຖະພາບຂອງການອອກແຮງງານຂຶ້ນຕື່ມ ແລະ ເປັນການຍູ ໜູນ ເສດຖະກິດ ແລະລະດັບຄວາມຢູ່ດີກິນດີຂອງປະຊາຊົນຂຶ້ນຢ່າງບໍ່ຢຸດຢັ້ງ. ຄວາມ ຮັບຮູ້ຂອງຊາວຜູ້ອອກແຮງງານວ່າຕົນບໍ່ແມ່ນເຮັດວຽກຮັບໃຊ້ພວກຂູດຮີດ ແຕ ຫາກແມ່ນເຮັດວຽກຮັບໃຊ້ຕົນເອງນັ້ນ ພາໃຫ້ເກີດມີຈິດໃຈຟົດຟື້ນໃນການອອກ ແຮງງານ, ມີການປະດິດຄິດສ້າງອັນໃຫມ່, ມີຫົວຄິດລິເລີ່ມ ແລະ ມີຂະບວນ ການ ແຂ່ງຂັນສັງຄົມນິຍົມ.

ຢູ່ ສ.ສ.ສ.ຊ ໃນປີ ໑໙ນ໓-໑໙ນ໗ ຫລັງຈາກໄດ້ສຳເລັດການດັດສ້າງ

ສັງຄົມນິຍົມເປັນສ່ວນໃຫຍ່ແລ້ວ ກໍໄດ້ມີການກໍ່ສ້າງສັງຄົມ ສັງຄົມນິຍົມຂັ້ນ. ໄຊຊະນະຂອງສັງຄົມນິຍົມ ໄດ້ພາໄປເຖິງຂອບເຂດມີການປ່ຽນແປງ ໃນໂຄງປະກອບຊົນຊັ້ນຂອງສັງຄົມ ຍ່າງເຖິງກົກເຖິງຮາກ. ຊົນຊັ້ນກຳມະກອນຂໍ້ ໄດ້ເປັນຊົນຊັ້ນທີ່ນຳພາຫະມະການຜະລິດອີກແລ້ວ. ຊົນຊັ້ນກຳມະກອນໄດ ກາຍເປັນຊົນຊັ້ນທີ່ໄດ້ຖືກປົດປ່ອຍອອກຈາກການຂູດຮີດ ແລະ ເປັນເຈົ້າຂອງພາຫະມະການຜະລິດອັນຕົ້ນຕໍ ຮ່ວມກັນກັບປະຊາຊົນທັງຊາດ. ຊົນຊັ້ນກຳມະກອນໄດ ກາຍມາເປັນກຳລັງແຮງທີ່ນຳພາການຂະຫຍາຍຕົວຂອງສັງຄົມ.

ຈາກການເປັນຊົນຊັ້ນທີ່ດຳເນີນການຜະລິດນ້ອຍ ແບບກະແຈກກະຈາຍຊົນຊັ້ນຊາວນາໄດ້ກາຍມາເປັນຊົນຊັ້ນໃຫມ່ອຽມ ທີ່ໄດ້ຖືກປົດປ່ອຍອອກຈາກ ການຂູດຮີດ. ໂດຍຜູກພັນພັນທະພາບກັບຊົນຊັ້ນກຳມະກອນຢ່າງໃກ້ຊິດຕິດແທດ ຊົນຊັ້ນຊາວນາລວມໝູ່ (ຊາວນາລວມ) ແມ່ນເຂົ້າຮ່ວມໃນການຄຸ້ມຄອງລັດ ສັງຄົມນິຍົມຢ່າງຕັ້ງໜ້າຕັ້ງຕາ. ສິ່ງທີ່ເປັນຈຸດລວມຂອງສອງຮູບການກຳມະສິດ ສັງຄົມນິຍົມ (ຄືຮູບການກຳມະສິດຂອງລັດ ແລະ ກຳມະສິດຂອງສະຫະກອນ) ໄດ້ເຮັດໃຫ້ຊົນຊັ້ນກຳມະກອນ ແລະ ຊົນຊັ້ນຊາວນາໃກ້ຊິດຕິດແທດກັນ, ໄດ ເຮັດໃຫ້ພັນທະພາບລະຫວ່າງສອງຊົນຊັ້ນນີ້ແໜ້ນແຟ້ນຂຶ້ນ ແລະ ກໍໄດ້ເຮັດ ໃຫ້ມິດຕະພາບລະຫວ່າງສອງຊົນຊັ້ນນີ້ນັບມື້ນັບຈະພົ້ງທະລາຍໄດ.

ປັນຍາຊົນຮຸ່ນໃຫມ່ ທີ່ອອກມາຈາກປະຊາຊົນ ແລະ ຮັບໃຊ້ປະຊາຊົນ ພາ ລະກິດສັງຄົມນິຍົມ ກໍໄດ້ເຕີບໃຫຍ່ຂຶ້ນ. ປັນຍາຊົນໄດ້ມີໂອກາດນຳໃຊ້ຄວາມຮູ ຂອງຕົນຢ່າງເປັນຫມາກເປັນຜົນ ເພື່ອຮັບໃຊ້ຜົນປະໂຫຍດຂອງປະຊາຊົນທີ່ພວມກໍ ສ້າງລະບອບກອມມູນິດ. ພ້ອມກັນກັບຊົນຊັ້ນກຳມະກອນ ແລະ ຊົນຊັ້ນຊາວນາ ປັນຍາຊົນ ແມ່ນເຂົ້າຮ່ວມຢ່າງຕັ້ງໜ້າ ໃນການຄຸ້ມຄອງປະເທດຊາດ.

ໄຊຊະນະຂອງສັງຄົມນິຍົມ ໄດ້ລົບລ້າງຄວາມບໍ່ສະເໝີພາບກັນລະຫວ່າງ ຊົນຊາດທາງດ້ານເສດຖະກິດ ແລະ ການເມືອງ, ມັນຫ້ງໄດ້ລົບລ້າງ ຄວາມ ແຕກຕ່າງກັນໃນເມື່ອກ່ອນ ລະຫວ່າງຕົວເມືອງ ກັບຊົນນະບົດ, ລະຫວ່າງ - ການອອກແຮງງານດ້ວຍສະໝອງ ກັບການອອກແຮງງານດ້ວຍຮ່າງກາຍ.

ບົນພື້ນຖານສິ່ງທີ່ເປັນຈຸດລວມຂອງສິດຜົນປະໂຫຍດອັນພື້ນຖານຂອງ ພວກ ກຳມະກອນ, ຊາວນາ ແລະ ປັນຍາຊົນນັ້ນ ໄດ້ເກີດມີຄວາມເປັນເອກະພາບ ກັນຂອງປະຊາຊົນໂຊວຽດ ທາງດ້ານສັງຄົມ, ການເມືອງ ແລະ ແນວຄິດອັນ

ບໍ່ມ້ວນຈະພ້ວງທະລາຍໄປໄດ້, ມີມິດຕະພາບລະຫ່ວ່າງປະຊາຊາດຕ່ວ່າງໆ ແລະ ມີນ້ຳໃຈຮັກຊາດໂຊວຽດ.

ການປ່ຽນແປ່ງອັນເຖິ່ງກິກເຖິ່ງຮາກ ທີ່ໄດ້ເກີດມ້ອນທ່ວ່າງດ້ານເສດຖະກິດ, ການເມ້ອ່ງ ແລະ ສັ່ງຄົມພ່ວ່າຍຫລ່ງທ່ີ່ການປະຕິວັດສັ່ງຄົມນ້ຍົມໄດ້ຮັບໄຊຊະນະ ຍູ່ລະຫະພາບໂຊວຽດນ້ັ້ນ ໄດ້ຖ້ກບ່ັ່ງໄວ້ໃນລັດຖະທ້ຳມະນູນຂອ່ງ ສ.ສ.ສ.ຊ (ລັດຖະທ້ຳມະນູນໄດ້ຖ້ກຮັບຮ່ອ່ງເອ້ົາໃນປ ໑໙໓໖).

ສັ່ງຄົມນ້ຍົມຂະຫຍ່ວ່ຍຕ້ວ ປະຈຸບ້ນ້ ຢູ່ ສ.ສ.ສ.ຊ ໄດ້ມ້ການ ກ໋ ສ່ວ່ງສັ່ງຄົມສັ່ງຄົມນ້ຍົມຂະຫຍ່ວ່ຍຕ້ວອ່ຶ່ງໃນ ປ ໑໙໑໗ ອ.ອ້ິ.ເລນ້ນ ໄດ້ເວ້ົ້າ ແມ່ນອະນ່ວ່ຄົດຂ່ອ່ງປະເທດຊ່ວ່ຊ. ການກ໋ ສ່ວ່ງສັ່ງຄົມນ້ຍົມຂະຫຍ່ວ່ຍຕ້ວ ໄດ້ສ່ວ່ງເງ່ອ່ນໄຂເພ່ອ່ເລ້ມລ້ງມ້ປະຕ້ິບ້ດໜ້ວ່ທ່ີ່ ອ້ນ່ຍ່ວ່ງໃຫ່ຍ ໃນພ່ວ່ກຕ້ວຈ່ງໄດ້. ນ້ັ້ນກ໋ຄ້ໜ້ວ່ທ່ີ່ກ໋ສ່ວ່ງພ້ນຖ່ານວ້ດຖ ແລະເຕ້ກ ນ້ກຂ່ອ່ງລະບ່ອ ກ່ອມມູນ້ດ.

ສັ່ງຄົມນ້ຍົມຂະຫຍ່ວ່ຍຕ້ວ ແມ່ນໄລ່ຍະເວລ່ວ່ໜ້ວ່ທ່ີ່ລະບ່ອ ສັ່ງຄົມອ້ນ່ໃໝ່ ຄ ລະບ່ອ ສັ່ງຄົມນ້ຍົມ ໄດ້ເປ່ັ່ງລັດສະໜ້ອ່ອກໃ້ຫ້ເຫ້ນ່ຢ່ວ່ງຮ່ອ ດ້ານ ກ່ຽວກ້ບ ບ້ນດ່ວ່ທ່ວ່ດ້ເລ້ດຂ່ອ່ງຕ້ນ ທ່ີ່ເໜ້ອ່ລະບ່ອ ທ້ນ້ຍົມ ທ່ວ່ງດ້ານເສດຖະກິດ, ການເມ້ອ່ງ, ວ້ທະຍ່ວ່ສ່ວ່ດ, ແນ່ວຄ້ດ, ວ້ດທະນ່ວ່ທ້ຳ, ທ່ວ່ງຂ່ວ່ງເຂດການ-ອ່ອກແຮ່ງງ່ານ ແລະ ຊ່ວ້ດການເປ້ນຢູ່່ປະຈ້ຳວ້ນຂ່ອ່ງປະຊ່ວ່ຊ້ນ ແລະໄດ້ສ່ວ່ງ ເງ່ອ່ນໄຂໃ້ຫ້ແ່ກ່ການກ໋ສ່ວ່ງລະບ່ອ ກ່ອມມູນ້ດຢ່ວ່ງມ້ໄຊ. ຢູ່່ໃນສັ່ງຄົມດ່ັ່ງກ່ວ່ອ ນ້:

- ບ໋ ່ວ່ຢູ່່ໃນຕ້ວເມ້ອ່ງ ກ໋ຄ້ຢູ່່ຊ້ນນະບ້ດ ການຜະລ້ດທ້ັ່ງໝ້ດແມ່ນຕ້ັ່ງຢູ່່ບ້ນ ພ້ນຖ່ານບ້ນດ່ວ່ທ່ວ່ດ້ເລ້ດ ການຜະລ້ດຂະຫຍ່ວ່ຍຕ້ວໄປຢ່ວ່ງມ້ແຜນ ການບ້ນພ້ນຖ່ານການປະສ່ານສ້ມຫ້ບກ້ນ ແບບກ່ວ່ຍອ້ນຊ້ ລະຫ່ວ່ງໜ່ວ່ກ ຜ້ນ ຂ່ອ່ງການປະຕ້ິວ້ດທ່ວ່ງດ້ານວ້ທະຍ່ວ່ສ່ວ່ດ-ເຕ້ກນ້ກ ກ້ບບ້ນດ່ວ່ທ່ວ່ດ້ເລ້ດ ຂ່ອ່ງ ສ່ວ່ງຄົມນ້ຍົມ ເພ່ອ່ແນ່ໃສ່ຕ່ອ່ບສະໜ່ອ່ງຄ່ວ່ງຄ່ວ່ງ ທ່ວ່ງ ຕ່ອ່ງການອ້ນ້ບ້ນ້ ນ້ບ ທະວ້ລ້ນ້ນ ຂ່ອ່ງປະຊ່ວ່ຊ້ນ ທ່ວ່ງດ້ານວ້ດຖ ແລະວ້ດທະນ່ວ່ທ້ຳ ໃ້ຫ້ໄດ ຢ່ວ່ງ ເຕ້ມ ສ່ວ່ມກ່ວ່ເກ່ົ່ວ;

- ເສດຖະກິດຢູ່່ໃນປະເທດໄດ້ກ່ວ່ວ ນ້ ສູ່່ລະດ້ບສູ່ງ ໃນການຂະຫຍ່ວ່ຍຕ້ວ,

ໄດ້ມີການສ້າງຕັ້ງລະບົບເສດຖະກິດແບບຄົບຊຸດ ຊຶ່ງປະກອບມີເສດຖະກິດແຫ່ງ ຊາດຂອງບັນດາສາທາລະນະລັດອັ້ນສະຫະພາບ ແລະ ຂັ້ນປົກຄອງຕົນເອງ - ແລະ ຂະຫຍາຍຕົວໄປຕາມແຜນການແຫ່ງລັດອັນດຽວກັນ ເພື່ອສົດຜົນປະ-ໂຫຍດຂອງທັງຫມົດປະເທດຊາດ ແລະ ຂອງແຕ່ລະສາທາລະນະລັດໂດຍ ສະ ເພາະ;

- ໄດ້ມີການລົບລ້າງຄວາມເປັນປໍລະປັກກັນ ລະຫວ່າງຊົນຊັ້ນແລະ ຊົນ ຊາດຕ່າງໆ. ທັງຫມົດສັງຄົມ ແລະ ແຕ່ລະຊົນຊາດ ແລະ ເຜົ່າຊົນລ້ວນແຕ່ມີ ໂຄງປະກອບສັງຄົມອັນຫນຶ່ງອັນດຽວກັນ ທີ່ໄດ້ມາຈາກພັນທະພາບລະຫວ່າງຊົນ ຊັ້ນກໍາມະກອນ, ຊົນຊັ້ນຊາວສະຫະກອນ ແລະ ປັນຍາຊົນຜູ້ອອກແຮງງານ;

- ໄດ້ມີການຮັບປະກັນໃຫ້ບັນດາສາທາລະນະລັດ ທີ່ປະກອບເຂົ້າຢູ່ໃນ ສ. ສ.ສ.ຊ ຂະຫຍາຍຕົວຢ່າງຮອບດ້ານພາຍໃຕ້ຄວາມເປັນເອກະພາບຢ່າງ ຕໍ່ ເນື່ອງກັນ ລະຫວ່າງໂຄງປະກອບລັດຂອງ ສ.ສ.ສ.ຊ ກັບໂຄງປະກອບ ລັດ ຂອງສາທາລະນະລັດແຫ່ງຊາດ ບົນພື້ນຖານບັນດາຫລັກການລວມສູນປະຊາ ທິ ປະໄຕ ແລະ ຮ່ວມກັນເປັນສະຫະພັນແບບສັງຄົມນິຍົມ ແລະ ຫລັກການປະຊາ ທິປະໄຕສັງຄົມນິຍົມຂອງໂຊວຽດ;

- ໄດ້ມີການສ້າງເງື່ອນໄຂອັນຈໍາເປັນ ເພື່ອໃຫ້ຊາວ ຜູ້ອອກແຮງງານ ເຂົ້າຮ່ວມໃນການເສີມຂະຫຍາຍວັທະຍາສາດ, ເຕັກນິກ ແລະ ວັດທະນະທໍາ ຢ່າງຕັ້ງຫນ້າ. ການທີ່ວັດທະນະທໍາຂອງບັນດາຊົນຊາດແລະຊົນເຜົ່າສັງຄົມນິຍົມ ໄດ້ມີການເບ່ງບານ, ໄດ້ຫຍັບເຂົ້າມ໋ກັນ ແລະ ໄດ້ປະກອບສ່ວນ ຄວາມອຸດົມ ຮ່ວມ ຊຶ່ງກັນ ແລະ ກັນ ນັ້ນມັນກາຍເປັນກົດເກນຢູ່ໃນຊີວິດທາງດ້ານຈິດໃຈ;

- ລະບົບແນວຄິດ ມາກ-ເລນິນ, ສາກົນສັງຄົມນິຍົມ ແລະ ມິດຕະພາບ ລະຫວ່າງນາໆຊາດ ໄດ້ຮັບການປັບປຸງໃຫ້ເຂັ້ມແຂງ, ຂະບວນວິວັດແຫ່ງການ ແລກປ່ຽນຄວາມຮ່ວມືທາງດ້ານວັດຖຸ ແລະ ຈິດໃຈ ແລະ ແລກປ່ຽນ ພະນັກ ງານນໍາກັນ ກໍ່ໄດ້ເປັນໄປຢ່າງຫວ້ອຫັນ, ການສົ່ງຜົນກະທົບຊຶ່ງກັນ ແລະ ກັນ ແລະ ການເຮັດໃຫ້ຫມົດລະບົບວິວັດການເປັນຢູ່ຂອງຊົນຊາດມີລັກສະນະ ສາ ກົນນັ້ນ ກໍ່ໄດ້ຮັບການເສີມສ້າງໃຫ້ແຂງແຮງຂັ້ນຕື່ມ ພາຍໃຕ້ຫລາຍໆຮູບການທີ່ ແຕກຕ່າງກັນ;

- ກຸ່ມຊົນແບບໃຫມ່ ຢູ່ໃນປະຫວັດສາດ ກໍ່ໄດ້ມີການຂະຫຍາຍຕົວ ຢ່າງ

ຮອບດ້ານນັ້ນ ກໍ່ຄືປະຊາຊົນໂຊວຽດ; ຄວາມເປັນເອກະພາບທາງດ້ານສັງຄົມ ການເມືອງ ແລ່ະ ແນວຄິດຢູ່ໃນສັງຄົມ ກໍ່ໄດ້ຮັບການຄ້ຳປະກັນຕື່ມ.

ຈຸດເດັ່ນ ທາງດ້ານການເມືອງຂອງສັງຄົມ ໃນລະບອບສັງຄົມນິຍົມ ຂະ ຫຍາຍຕົວ ແມ່ນການຫັນປ່ຽນຂອງລັດຜະເດັດການຂອງຊົນຊັ້ນກຳມາຊີບ ໄປ ເປັນລັດສັງຄົມນິຍົມຂອງທົ່ວປວງຊົນ ບ່ອນທີ່ຊົນຊັ້ນກຳມະກອນເປັນຜູ້ມີບົດບາດ ນຳໜ້າ; ທາງດ້ານເສດຖະກິດ ກໍ່ແມ່ນຂະບວນການຫັນປ່ຽນພາຫະນະ ການ ຜະລິດ ແລະ ແຮງງານໄປເປັນຂອງສັງຄົມ ແບບສັງຄົມນິຍົມ ທີ່ນັບມື້ນັບລ້ຳ ເຊີ່ງກວ່າເກົ່າ, ແມ່ນການປັບປຸງໂດຍດັດແກ້ການພົວພັນແຫ່ງການຜະລິດ ໃຫ ກ້າວໜ້າກວ່າເກົ່າ ບົນພື້ນຖານການເສີມຂະຫຍາຍກຳລັງການຜະລິດ ຢ່າງ ແຂງແຮງ. ການກໍ່ສ້າງສັງຄົມ ສັງຄົມນິຍົມຂະຫຍາຍຕົວຢູ່ ສ.ສ.ສ.ຊ ໄດ ຖືກບົ່ງໄວ້ຢູ່ໃນລັດຖະທຳມະນູນສະບັບໃໝ່ ຂອງ ສ.ສ.ສ.ຊ ທີ່ໄດ້ຮັບ ການ ຮັບຮອງເອົາໃນປີ ໑໙໗໗.

ໃນໄລຍະການກໍ່ສ້າງ ແລະ ສືບຕໍ່ເສີມຂະຫຍາຍສັງຄົມນິຍົມ ຂະຫຍາຍ-ຕົວນັ້ນ ໄດ້ມີການສ້າງປະຖົມປັດໄຈທາງດ້ານວັດຖຸ ແລະ ຈິດໃຈຫຼາຍ ດ້ານ ເພື່ອກ້າວຂຶ້ນໄປຫາການຂະຫຍາຍຕົວໃນຂັ້ນໃໝ່ ທີ່ສູງກວ່າເກົ່ານັ້ນຄື ກ້າວ ໄປຫາສັງຄົມກອມມູນິດ.

ປະຊາຊົນໂຊວຽດ ໄດ້ຮັບພາລະໜ້າທີ່ທາງປະຫວັດສາດໃນການເປັນ ຜູ ເປີດຊ່ອງທາງ ແລະ ເປັນຜູ້ນຸກເບີກເສັ້ນທາງຂະຫຍາຍຕົວ ອັນໃໝ່ຂອງສັງ ຄົມ.

ໄຊຊະນະຂອງສັງຄົມນິຍົມຢູ່ ສ.ສ.ສ.ຊ ໄດ້ມີຄວາມໝາຍສຳຄັນ ອັນ ໃຫຍ່ຍິ່ງ ທາງດ້ານສາກົນ. ມັນໄດ້ເປັນບາດກ້ອນຕີໃສ່ລະບອບທຶນນິຍົມແຫ່ງ-ໂລກ. ຢູ່ໃນກຳນົດເວລາອັນສັ້ນ ຖ້າສົມທຽບກັບປະຫວັດສາດຂອງມະນຸດຊາດ ນັ້ນ ສັງຄົມນິຍົມ ໄດ້ສະແດງອອກໃຫ້ເຫັນເຖິງທ່າດີເລີດຂອງຕົນເໜືອທຶນນິ-ຍົມ. ສິ່ງດັ່ງກ່າວ ໄດ້ເຮັດໃຫ້ມວນຊົນຊາວຜູ້ອອກແຮງງານ ເພີ່ມຄວາມເຊື່ອ ໝັ້ນອັນຕື່ມວ່າ ສັງຄົມນິຍົມ ມີຄວາມສາມາດໄດ້ຮັບໄຊຊະນະໄດ້ໃນຂອບເຂດ ທົ່ວໂລກ. ບັນດາປະເທດຢູ່ໃນວົງສາຄະນາຍາດສັງຄົມນິຍົມ ກໍ່ໄດ້ເພີ່ມຄວາມ ຄວາມມັ່ງຄັ່ງເຂັ້ມແຂງອັນຕື່ມ.

ພາຍຫລັງທີ່ໄດ້ມີການປະຕິບັດບັນດາແຜນການ ກ່ຽວກັບການຫັນປ່ຽນເປັນ

ຊຸດສາຫະກຳສັງຄົມນິຍົມ ແລະ ການຫັນປ່ຽນການກະສິກຳໄປເປັນແບບສະຫະກອນ ປະກົດຜົນເປັນຈິງຢ່າງມີໄຊແລ້ວນັ້ນ ຢູ່ໃນບັນດາປະເທດສ່ວນຫລວງ - ຫລາຍທີ່ໄດ້ກ້າວຂຶ້ນຕາມເສັ້ນທາງສັງຄົມນິຍົມ ລັກສະນະຫລາຍພາກສ່ວນຢູ່ໃນເສດຖະກິດ ກໍ່ໄດ້ຖືກລົບລ້າງຢ່າງສົ້ນເຊີງ ແລະ ການພົວພັນແຫ່ງການຜະລິດ ແບບສັງຄົມນິຍົມ ກໍ່ໄດ້ມີຖານະເປັນເຈົ້າຄອບຄອງ ອັນນີ້ຫມາຍຄວາມວ່າ ບັນດາປະເທດດັ່ງກ່າວ ໄດ້ພາກັນຜ່ານພົ້ນໄປແລ້ວ ຫລືວ່າພວມຈະຜ່ານພົ້ນ ສະໄຫມຂ້າມຜ່ານ ຈາກທຶນນິຍົມໄປສູ່ສັງຄົມນິຍົມ.

ການລົບລ້າງຄວາມອາດສາມາດ ຟື້ນຟູທຶນນິຍົມຄືນໃຫມ່ ຢູ່ໃນບັນ ດາປະເທດ ສັງຄົມນິຍົມ

ຫມາກຜົນໄຊຊະນະໃນຂັ້ນສົມບູນ - ຂອງສັງຄົມນິຍົມຢູ່ ສ.ສ.ສ.ຊ ແມ່ນ ການຈັດຕັ້ງລະບົບການຜະລິດ ອັນ ໃຫມ່ຂອງສັງຄົມໃຫ້ເປັນເຈົ້າ ຄອບ ຄອງຢ່າງຂາດຂັ້ນ. ອັນນີ້ຫມາຍຄວາມວ່າ ການພົວພັນແຫ່ງການຜະລິດ ແບບ ສັງຄົມນິຍົມຢູ່ໃນປະເທດ ໄດ້ຮັບການປັບປຸງໃຫ້ເຂັ້ມແຂງຢູ່ໃນທົ່ວເສດຖະກິດ-ແຫ່ງຊາດ ແລະ ສະເພາະການພົວພັນແບບທຶນນິຍົມ ແລະ ພວກຊົນຊັ້ນຂູດຮີດ ແລ້ວ ກໍ່ແມ່ນໄດ້ຖືກລົບລ້າງຢ່າງສົ້ນເຊີງໄປແລ້ວ. ແຕ່ໃນເວລານັ້ນ ສັງຄົມນິ ຍົມ ຢູ່ ສ.ສ.ສ.ຊ ຍັງບໍ່ທັນໄດ້ຮັບໄຊຊະນະຢ່າງສົ້ນເຊີງເທື່ອ. ສະຫະພາບ ໂຊວຽດ ໄດ້ເປັນປະເທດຫນຶ່ງປະເທດດຽວເທົ່ານັ້ນ ທີ່ໄດ້ກໍ່ສ້າງສັງຄົມນິຍົມ ແລະສະຫະພາບໂຊວຽດ ກໍ່ໄດ້ຕົກຢູ່ໃນວົງປິດລ້ອມຂອງທຶນນິຍົມ. ຍ້ອນແນວນີ້ ມັນຈຶ່ງຍັງຄົງຮັກສາໄພອັນຕະລາຍອັນທີ່ວ່າອາດຈະມີການຟື້ນຟູລະບຽບ ການ ນາຍທຶນ ແລະ ພວກເຈົ້າທີ່ດິນຄືນໃຫມ່ ໂດຍອີງໃສ່ກຳລັງຂອງຈັກກະພັດນິຍົມ ແລະ ພວກປະຕິການສາກົນ.

ສະພາບການຢູ່ໃນໂລກ ໄດ້ມີການປ່ຽນແປງຫລັງຈາກສົງຄາມໂລກຄັ້ງ ທີ ສອງ. ປະເທດອື່ນໆຈຳນວນຫນຶ່ງ ກໍ່ໄດ້ກ້າວຂຶ້ນຕາມເສັ້ນທາງ ສັງຄົມນິຍົມ. ພາຍຫລັງທີ່ໄດ້ສຳເລັດການກໍ່ສ້າງສັງຄົມນິຍົມແລ້ວ ສະຫະພາບໂຊວຽດ ກໍ່ໄດ້ ກ້າວເຂົ້າສູ່ໄລຍະແຫ່ງການຂະຫຍາຍ ການກໍ່ສ້າງລະບອບກອມມູນິດ. ການ ເຕີບໃຫຍ່ຂະຫຍາຍຕົວຂອງຄວາມເຂັ້ມແຂງທາງດ້ານເສດຖະກິດ ແລະ ການ ເມືອງຂອງ ສ.ສ.ສ.ຊ, ການສ້າງຕັ້ງ ແລະ ການປັບປຸງລະບົບສັງຄົມນິຍົມ

ແຫ່ງໂລກໃຫ້ເຂັ້ມແຂງ ໄດ້ເຮັດໃຫ້ການທຳລາຍຫມາກຜົນ ຂອງການກໍ່ ສ້າງ ສັງຄົມນິຍົມ ບໍ່ໄດ້ຮັບຜົນສຳເລັດ. ໄຊຊະນະຂອງສັງຄົມນິຍົມຢູ່ ສ.ສ.ສ.ຊ ໄດ້ກາຍເປັນໄຊຊະນະຢ່າງສັ້ນເຊີງແລ້ວ. ມາບາດນີ້ ຄວາມອາດສາມາດ - ທາງດ້ານສັງຄົມ-ເສດຖະກິດໃນການຈະຟື້ນຟູທຶນນິຍົມຄືນໃຫມ່ ໄດ້ຖືກລົບລ້າງ ຢ່າງສັ້ນເຊີງ ບໍ່ສະເພາະພຽງແຕ່ຢູ່ສະຫະພາບໂຊວຽດເທົ່ານັ້ນ ແຕ່ກໍ່ຍັງຢູ່ໃນ ປະເທດສັງຄົມນິຍົມອື່ນໆອີກ. ກຳລັງແຮງເຕົ້າໂຮມກັນຂອງວົງສາຄະນາຍາດ ສັງຄົມນິຍົມເປັນສິ່ງຄຳ້ປະກັນບໍ່ໃຫ້ພວກປະຕິການສາກົນ ມາລ່ວງລະເມີດ ປະ ເທດສັງຄົມນິຍົມແຕ່ລະປະເທດໄດ້ຢ່າງເດັດຂາດ. ການປຸ້ມລຸມກັນເຂົ້າ ເປັນ ຄ້າຍເອກະພາບອັນດຽວກັນຂອງບັນດາປະເທດສັງຄົມນິຍົມ, ຄວາມເປັນ ເອ ກະພາບຢູ່ພາຍໃນຄ້າຍສັງຄົມນິຍົມອັນນັບມື້ນັບເຂັ້ມແຂງຂຶ້ນຕື່ມ ແລະ ຄວາມ ມັ່ງຄັ່ງເຂັ້ມແຂງອັນນັບມື້ທະວີຄູນຂຶ້ນ ຢ່າງບໍ່ຢຸດຢັ້ງຂອງມັນ ລ້ວນແຕ່ເປັນ ສິ່ງ ຄຳ້ປະກັນໄຊຊະນະ ໃນຂັ້ນສົມບູນຂອງສັງຄົມນິຍົມ ແລະ ລະບອບກອມມູນິດຢູ່ ໃນຂອບເຂດຂອງທັງຫມົດຂອງລະບົບສັງຄົມນິຍົມແຫ່ງໂລກ.

ການກໍ່ສ້າງ ແລະ ການເສີມຂະຫຍາຍສັງຄົມນິຍົມຢູ່ໃນຂອບເຂດຂອງແຕ່ ລະປະເທດ ແລະ ຢູ່ໃນຂອບເຂດສາກົນນັ້ນ ແມ່ນຫມາກຜົນອັນຍິ່ງໃຫຍ່ ຂອງ ການປະດິດສ້າງປະຫວັດສາດຂອງມວນຊົນ ຊາວຜູ້ອອກແຮງງານເປັນລ້ານ ໆ ຄົນ ທີ່ໄດ້ເປັນເຈົ້າຂອງໂຊກຊາຕາຂອງຕົນເອງ. ຄືດັ່ງ ກ.ມາກ ໄດ້ ຄາດ ຄະເນໄວ້ລ່ວງຫນ້ານັ້ນ ມັນພວມເກີດມີຂະບວນວິວັດອັນມີລັກສະນະເປັນ ກົດ ເກນແຫ່ງການກ້າວຂຶ້ນ ຈາກສະໄຫມປະຖົມປະຫວັດສາດ ຂອງສັງຄົມມະນຸດ- ມາຫາສະໄຫມແຫ່ງການປະດິດສ້າງປະຫວັດສາດ ອັນແທ້ຈິງຂອງສັງຄົມມະນຸດ ຢ່າງມີສະຕິສຳນຶກ.

ໄຊຊະນະອັນເປັນປະຫວັດການຂອງສັງຄົມນິຍົມ ມີຄວາມຫມາຍ ສຳຄັນ ຢ່າງໃຫຍ່ຫລວງ ທາງດ້ານສາກົນ. ຊາວຜູ້ອອກແຮງງານໄດ້ເຫັນໄດ້ໃນ ຕົວ ຈິງວ່າ ສັງຄົມໃຫມ່ ທີ່ມີທ່າດີເລີດລົ້ນໂລກເກົ່າຢ່າງໃຫຍ່ຫລວງ ຕ້ອງມາແທນ ທີ່ທຶນນິຍົມຢ່າງຫລີກເວັ້ນບໍ່ໄດ້. ສັງຄົມນິຍົມ ປົດປ່ອຍຄົນອອກຈາກແອກ ຫນີບ ເຕັງຂອງການກົດຂີ່ຂູດຮີດ ແລະ ເຮັດໃຫ້ຄົນມີສິດມີສຽງ ແລະ ມີຄວາມເຊື່ອ ຫມັ້ນໃນອະນາຄົດຂອງຕົນ. ສັງຄົມນິຍົມ ໄດ້ຊີ້ບອກໃຫ້ມວນມະນຸດ ມອງເຫັນ ຄວາມອາດສາມາດຈະໄດ້ຫລຸດພົ້ນອອກຈາກຈັກກະພັດນິຍົມໃນຕໍ່ຫນ້າ.ລະບອບ

ສັງຄົມອັນໃຫມ່ທີ່ຕັ້ງຢູ່ບົນພື້ນຖານ ກຳມະສິດລວມໝູ່ ກ່ຽວກັບພາຫະນະ ການ ຜະລິດ ແລະ ສິດອຳນາດຂອງຊາວຜູ້ອອກແຮງງານ ມີຄວາມສາມາດທີ່ຈະຮັບ ປະກັນໃຫ້ເສດຖະກິດຂະຫຍາຍຕົວໄປຢ່າງມີແຜນການ ໂດຍປາສະຈາກ ວິກິດ ການ, ເພື່ອສິດຜົນປະໂຫຍດຂອງປະຊາຊົນ, ຄ້ຳປະກັນສິດທິຂອງຊາວຜູ້ອອກ ແຮງງານ ທາງດ້ານສັງຄົມ ແລະ ການເມືອງ, ສ້າງເງື່ອນໄຂເພື່ອໃຫ້ມີປະ ຊາທິປະໄຕຢ່າງແທ້ຈິງ, ເພື່ອໃຫ້ປວງຊົນເປັນຈຳນວນຫລວງຫລາຍ ເຂົ້າ ຮ່ວມຕົວຈິງ ໃນການຄຸມຄອງສັງຄົມ, ເພື່ອແນໃສ່ເສີມຂະຫຍາຍບຸກຄະລິກ - ຢ່າງສູດຊຶດ ແລະ ເຮັດໃຫ້ຊົນຊາດມີຄວາມສະເໝີພາບ ແລະ ສາມັກຄີ ມິດ ຕະພາບກັນ. ໃນຕົວຈິງ ກໍ່ໄດ້ມີການຢັ້ງຢືນໃຫ້ເຫັນແລ້ວວ່າ ມີແຕ່ສັງຄົມນິຍົມ ເທົ່ານັ້ນ ທີ່ຈະສາມາດແກ້ໄຂບັນຫາພື້ນຖານ ທີ່ຕ້ອນຕໍ່ໜ້າມວນມະນຸດ.

ແມ່ນ ຍ້ອນສາຍເຫດນີ້ເອງ ໄຊຊະນະອັນຍິ່ງໃຫຍ່ຂອງສັງຄົມນິຍົມ ຈຶ່ງ ເປັນການປຸກລະດົມຊາວຜູ້ອອກແຮງງານຢູ່ໃນບັນດາປະເທດທຶນນິຍົມ ໃຫ້ ດຳ ເນີນການຕໍ່ສູ້ເພື່ອສິດທິຂອງຕົນ ແລະ ເພື່ອປົດປ່ອຍຕົນເອງອອກຈາກແອກ - ໜີ້ບເຕັ້ງຂອງທຶນ.

ການກໍ່ສ້າງສັງຄົມນິຍົມຢູ່ ສ.ສ.ສ.ຊ ແລະ ການສ້າງສາສັງຄົມນິຍົມ - ຢ່າງມີໄຊຢູ່ໃນປະເທດອື່ນໆ ໃນວົງສາຄະນາຍາດສັງຄົມນິຍົມ ແມ່ນສິ່ງຢັ້ງຢືນ ຢ່າງເດັ່ນຊັດກ່ຽວກັບມະຫາໄຊຊະນະຂອງທິດສະດີມາກ-ເລນິນ ທີ່ເປັນ ເຂັ້ມ ທິດຊີ້ທາງໃຫ້ຊາວຜູ້ອອກແຮງງານ ກ້າວໄປຫາການປົດປ່ອຍອອກຈາກສະພາບ ເປັນຂ້າທາດຂອງທຶນນິຍົມ ແລະ ກ້າວຂຶ້ນໄປສູ່ລະບອບສັງຄົມອັນໃຫມ່ ຄືກ້າວ ຂຶ້ນສູ່ລະບອບກອມມູນິດ.

ຄຳຖາມເພື່ອທວນຄືນ

ຑ. ເປັນຫຍັງ ຈຶ່ງມີຄວາມຈຳເປັນທີ່ຈະຕ້ອງມີສະໄໝຂ້າມຜ່ານ ຈາກ ທຶນນິ ຍົມໄປຫາສັງຄົມນິຍົມ ?

ຒ. ຜະເດັດການຂອງຊົນຊັ້ນກຳມາຊີບ ແມ່ນຫຍັງ ແລະ ມີຮູບການໃດແດ່ ?

ຓ. ເນື້ອໃນຂອງບັນດາກິດເກມລວມ ໃນສະໄໝຂ້າມຜ່ານມີຫຍັງແດ່ ?

ດ. ພາກສ່ວນເສດຖະກິດສັງຄົມນິຍົມ ຢູ່ໃນເສດຖະກິດແຫ່ງຊາດ ແມ່ນ ສ້າງ

ຂັ້ນຄືແນວໃດ ?

๕. ມີພາກສ່ວນເສດຖະກິດ ແລະ ຊົນຊັ້ນອັນໃດແດ່ ຢູ່ໃນສະໄຫມລິດໃຫຍ່ຜ່ານ ?

ຜ. ເນື້ອໃນຂອງຂໍ້ຂັດແຍ່ງໃນສະໄຫມຂ້ານຜ່ານ ມີຫຍັງແດ່ ?

ກ. ນະໂຍບາຍທາງດ້ານເສດຖະກິດຂອງລັດສັງຄົມນິຍົມ ໃນສະໄຫມ ຂ້ານຜ່ານມີເນື້ອໃນອັນໃດແດ່ ແລະ ໄດ້ຮັບການປະຕິບັດຄືແນວໃດ ?

ຊ. ທາດແທ້ເນື້ອໃນແລະຄວາມຫມາຍສຳຄັນ ຂອງການຫັນປ່ຽນເປັນອຸດສາຫະກຳຫນັກສັງຄົມນິຍົມ ມີຄືແນວໃດ ?

ຍ. ການຫັນປ່ຽນການກະສິກຳໄປເປັນສະຫະກອນແບບສັງຄົມນິຍົມມີເນື້ອແທ້ ແລະຄວາມຫມາຍສຳຄັນຄືແນວໃດ ?

๑๐. ໄຊຊະນະຂອງສັງຄົມນິຍົມ ແມ່ນຫມາຍເຖິງຫຍັງ ?

๑๑. ໄດ້ມີການຮັບປະກັນຄືແນວໃດ ກ່ຽວກັບການລົບລ້າງຢ່າງສົ້ນເຊີງ ບໍ່ໃຫ້ມີຄວາມອາດສາມາດທາງດ້ານສັງຄົມ-ເສດຖະກິດ ທີ່ຈະຟື້ນຟູທຶນນິຍົມ-ຄືນໃຫມ່ ຢູ່ໃນບັນດາປະເທດສັງຄົມນິຍົມ ?

ພາກ ສິບ

ກຳລັງແຫ່ງການຜະລິດແລະການພົວພັນແຫ່ງການຜະລິດ ຂອງສັງຄົມສັງຄົມນິຍົມ

ເພື່ອຈະສຶກສາຄົນຄວ້າບົນດ້ານກົດໝາຍ ແລະ ມາດຕະຖານ ທາງດ້ານເສດ ຖະກິດຂອງສັ່ງຄົມນິຍົມ ໃນເບື້ອງຕົ້ນມີຄວາມຈຳເປັນ ທີ່ຈະຕ້ອງເວົ້າເຖິງລັກ ສະນະລວມຂອງກຳລັງການຜະລິດ ແລະ ການພົວພັນແຫ່ງການຜະລິດຂອງສັງ ຄົມ ສັງຄົມນິຍົມ.

๑. ກຳລັງການຜະລິດ

ກຳລັງການຜະລິດຂອງສັງຄົມ ສັງຄົມນິຍົມ ແມ່ນການຜະລິດໃຫຍ່ ແບບໃຊ້ ເຄື່ອງຈັກເຄື່ອງລາງຢູ່ໃນໝົດທຸກຂະແໜງການຂອງເສດຖະກິດແຫ່ງຊາດຊຶ່ງ ອີງໃສ່ເຕັກນິກລະດັບສູງ ແລະ ການອອກແຮງງານຂອງຊາວຜູ້ອອກແຮງງານ ຜູ້ທີ່ໄດ້ຮັບການປົດປ່ອຍອອກຈາກການຂູດຮີດ.

ພາຍໃຕ້ ລະບອບສັງຄົມນິຍົມ ການຜະລິດໃຫຍ່ແບບໃຊ້ເຄື່ອງຈັກເຄື່ອງ-ລາງ ແມ່ນເປັນຂອງໝົດສັງຄົມ, ມັນຂະຫຍາຍຕົວໄປຢ່າງມີແຜນການ ແລະ ຖືກນຳໃຊ້ເພື່ອແນໃສ່ຍົກລະດັບຄວາມຢູ່ດີກິນດີທາງດ້ານວັດຖຸ ແລະ ລະດັບວັດ

ທະນະທຳຂອງຊາວຜູ້ອອກແຮງງານທັງໝົດ ຢັ້ງຢືນ. ແມ່ນຢູ່ບ່ອນນຶ່ງເອງ ຄື ຄວາມແຕກຕ່າງກັນລະຫວ່າງການຜະລິດສັງຄົມນິຍົມກັບການຜະລິດທຶນນິຍົມ.

ຈຸດພິເສດອັນສຳຄັນຍິ່ງ ຂອງການຜະລິດໃຫຍ່ ແບບໃຊ້ເຄື່ອງຈັກ ເຄື່ອງ ລາງຢູ່ໃນສັງຄົມສັງຄົມນິຍົມ ແມ່ນຢູ່ບ່ອນມັນມີລະດັບເຕັກນິກສູງ ແລະ ມີຈັງ ຫວະອັນວ່ອງໄວ ແລະ ມີລັກສະນະເນື່ອງນິດລຽນຕິດໃນການຂະຫຍາຍຕົວ - ຂອງຄວາມກ້າວໜ້າທາງດ້ານເຕັກນິກ.

ຄວາມກ້າວໜ້າທາງດ້ານເຕັກນິກ ການປະຕິວັດທາງດ້ານວິທະຍາ-ສາດ-ເຕັກນິກ ໃນປະຈຸບັນນີ້ໄດ ເປີດຊ່ອງທາງໃຫ້ແກ່ການພັດທະນາຄວາມກ້າວໜ້າທາງດ້ານເຕັກນິກ ຢ່າງ ກວ້າງຂວາງ ຢູ່ໃນລະບອບສັງຄົມນິຍົມ. ການນຳເອົາຜົນສຳເລັດຂອງການ-ປະຕິວັດທາງດ້ານວິທະຍາສາດ-ເຕັກນິກ ໄປບວກໃສ່ບັນດາທ່າດີເລີດຂອງສັງ ຄົມນິຍົມ ແບບກາຍວິພາກ ໄດ້ເປັນພື້ນຖານໃຫ້ແກ່ຄວາມກ້າວໜ້າທາງດ້ານ ເຕັກນິກຢູ່ ສ. ສ.ສ.ຊ. ຄວາມກ້າວໜ້າທາງດ້ານເຕັກນິກຢູ່ໃນເສດຖະກິດ ແຫ່ງຊາດ ໝາຍເຖິງການພັດທະນາວິທະຍາສາດ ແລະ ເຕັກນິກຢ່າງ ບໍ່ຢຸດ ຢັ້ງ ແລະ ການຍົກລະດັບທາງດ້ານວັດທະນະທຳ ແລະ ເຕັກນິກຂອງຊາວ ຜູ ອອກແຮງງານໃຫ້ສູງຂຶ້ນ, ການຈັດຕັ້ງການຜະລິດທີ່ທັນສະໄໝກ່ວາເກົ່າແລະ ບົນພື້ນຖານທັງໝົດເຫລົ່ານີ້ ໃຫ້ຍົກສະມັດຖະພາບຂອງແຮງງານ ໃນສັງຄົມ-ນິຍົມຢ່າງສຸດຂີດ.

ພາຍໃຕ້ລະບອບສັງຄົມນິຍົມ ແມ່ນມີການພັດທະນາຄວາມກ້າວໜ້າ ທາງ ດ້ານເຕັກນິກຢູ່ໃນຂະແໜງການຕ່າງໆ ຂອງການຜະລິດຢ່າງລຽນຕິດ ແລະ ຢ່າງມີແຜນການ ບົນພື້ນຖານຜົນສຳເລັດອັນໃຫຍ່ສຸດຢູ່ໃນດ້ານວິທະຍາສາດ - ແລະຄວາມຕັ້ງໜ້າຢ່າງກ້າວໜ້າ ປະດິດສ້າງ ຂອງຊາວຜູ້ອອກແຮງງານ. ຄວາມກ້າວໜ້າ ທາງດ້ານເຕັກນິກ ເປັນພາຫະນະອັນແຮງກ້າເພື່ອເພີ່ມທະວີ ຄວາມຮັ່ງມີຂອງສັງຄົມ ເພື່ອຈຸດປະສົງຈຸກຍູ້ລະດັບຊີວິດການເປັນຢູ່ຂອງປະຊາ ຊົນໃຫ້ສູງຂຶ້ນຕໍ່ໆຢ່າງບໍ່ຢຸດຢັ້ງ.

ພາຍໃຕ້ລະບອບສັງຄົມນິຍົມ ບັນດາທິດທາງພື້ນຖານ ໃນການພັດທະນາ ຄວາມກ້າວໜ້າ ທາງດ້ານເຕັກນິກ ແມ່ນການດັດແກ້ເຄື່ອງມືການຜະລິດແລະ

ການວິວັດທາງດ້ານເຕັກໂນໂລຢີ ໃຫ້ກ້າວໜ້າກວ່າເກົ່າ, ການປະກອບກຳ ຈັກ ແລະ ລະບົບອັດຕະໂນມັດເຂົ້າໃນການອອກແຮງງານ, ການປະກອບໄຟ ຟ້າເຂົ້າໃນເສດຖະກິດແຫ່ງຊາດ, ການປະກອບເຄມີເຂົ້າໃນການຜະລິດຢ່າງ ກວ້າງຂວາງ, ການນຳໃຊ້ພະລັງງານປະລະມານູ ເພື່ອຮັບໃຊ້ເປົ້າໝາຍສັນ ຕິພາບ. ບັນດາທິດທາງພັດທະນາເຕັກນິກ ດັ່ງກ່າວທັງໝົດນີ້ ລ້ວນແຕ່ມີການ ພົວພັນເຊື່ອມໂຍງກັນແລະກັນຢ່າງສະໜິດແໜ້ນ ແລະ ອີງຕໍ່ກັນແລະກັນ. ການປະ ກອບກຳຈັກແມ່ນປະຖົມປັດໄຈຂອງການປະກອບລະບົບອັດຕະໂນມັດ. ການປະ ກອບກຳຈັກ ແລະ ການປະກອບລະບົບອັດຕະໂນມັດ ຂະຫຍາຍຕົວໄປ ບົນພື້ນ ຖານການປະກອບໄຟຟ້າເຂົ້າໃນການຜະລິດ ແຕ່ການປະກອບໄຟຟ້າພັດບໍ່ອາດ ຈະເປັນໄປໄດ້ ຖ້າຫາກວ່າບໍ່ມີການປະກອບເຄື່ອງກຳຈັກ ແລະ ບໍ່ມີການປະ-ກອບລະບົບອັດຕະໂນມັດຢ່າງຮອບດ້ານ. ການປະກອບເຄມີເຂົ້າໃນເສດຖະ-ກິດແຫ່ງຊາດ ບໍ່ອາດເປັນໄປໄດ້ ຖ້າຫາກວ່າບໍ່ມີການປະກອບກຳຈັກ, ບໍ່ມີ - ການປະກອບລະບົບອັດຕະໂນມັດ ແລະ ບໍ່ມີການປະກອບໄຟຟ້າເຂົ້າໃນ ການ ຜະລິດ. ແຕ່ຖ້າເບິ່ງໄປໃນອີກດ້ານໜຶ່ງແລ້ວ ການປະກອບເຄມີ ເຂົ້າ ໃນ ການຜະລິດ ແມ່ນມີຄວາມໝາຍສຳຄັນຫລາຍຢ່ານ ໃນການພັດທະນາ ການປະກອບກຳຈັກ, ການປະກອບລະບົບອັດຕະໂນມັດ ແລະ ການຕິດຕັ້ງໄຟ ຟ້າ.

ພື້ນຖານຂອງຄວາມກ້າວໜ້າທາງດ້ານເຕັກນິກ ແມ່ນການດັດແປງເຄື່ອງ ມືການຜະລິດໃຫ້ກ້າວໜ້າກວ່າເກົ່າ ທີ່ໝາຍເຖິງການປະດິດຄິດແຕ່ງ ເຄື່ອງ ຈັກທີ່ປະຢັດການໃຊ້ຈ່າຍກວ່າເກົ່າ ແລະ ມີສະມັດຖະພາບສູງກວ່າເກົ່າ ແລະ ການນຳເອົາມັນເຂົ້າໄປປະກອບໃນການຜະລິດ. ສິ່ງດັ່ງກ່າວນີ້ ພົວພັນ ຢ່າງ ສະໜິດແໜ້ນກັບການປັບປຸງເຕັກໂນໂລຢີ ການຜະລິດໃຫ້ດີກວ່າເກົ່າເປັນຕົ້ນ ແມ່ນ ວິທີການຂຸດຄົ້ນ, ປຸງແຕ່ງ ແລະ ນຳໃຊ້ວັດຖຸດິບ ແລະ ພັດສະດຸ,ການ ເລືອກຕັ້ນໃຊ້ ວັດຖຸດິບ ແລະ ພັດສະດຸຊະນິດໃໝ່, ການນຳໃຊ້ຄວາມໄວ,ພະ ລັງແຮງ ແລະ ອຸນຫະພູມໃນລະດັບສູງ ແລະ ໃນລະດັບສູງຢ່າງສຸດຍອດ ກໍ່ຄື ວິທີການອື່ນໆໃນການວິວັດແຫ່ງການຜະລິດແບບສຸມ.

ການເຮັດໃຫ້ອຸປະກອນທັນສະໄໝນັ້ນມີຄວາມໝາຍສຳຄັນຢ່າງໃຫຍ່ຫລວງ ຢູ່ໃນຄວາມກ້າວໜ້າທາງດ້ານເຕັກນິກ. ການເຮັດໃຫ້ທັນສະໄໝແມ່ນ ການ

ເຮັດໃຫ້ອຸປະກອນທີ່ພວມເຄື່ອນໄຫວຜະລິດຢູ່ໃນປະຈຸບັນນີ້ ມີໃບໜ້າໃໝ່ອ່ຽມ ອ້ມ ແລະ ມີການດັດແກ້ໃຫ້ ກ້າວໜ້າກວ່າເກົ່າດ້ວຍວິທີການສັບປ່ຽນ ພາກ ສ່ວນປະກອບຢູ່ໃນເຄື່ອງຈັກ ທີ່ເກົ່າແກ່ແລ້ວ ແລະ ອື່ນໆ. ປະສິດທິພົນ ທາງ ດ້ານເສດຖະກິດຂອງການເຮັດໃຫ້ທັນສະໄໝ ສະແດງຕົວອອກຢູ່ບ່ອນວ່າເມື່ອ ພວກເຮົານຳໃຊ້ມັນແລ້ວ ມັນກໍ່ມີຄວາມສາມາດເພີ່ມທະວີບໍລິມາດການຜະລິດ-ອັນຕື່ມ ແລະ ປັບປຸງຕົວເລກຄາດໝາຍຄຸນນະພາບໃນການເຄື່ອນໄຫວ ຂອງ ວິສາຫະກິດ ໃຫ້ດີອັນຕື່ມ ພາຍໃນກຳນົດເວລາອັນສັ້ນໆ ໂດຍບໍ່ຕ້ອງມີການໃຊ້ ຈ່າຍຢ່າງຫລວງຫລາຍ. ການປັບປຸງເຄື່ອງມືການຜະລິດໃຫ້ກ້າວໜ້າ ກວ່າ ເກົ່າ ແມ່ນພື້ນຖານເພື່ອສືບຕໍ່ເສີມຂະຫຍາຍກຳລັງການຜະລິດຢູ່ໃນປະເທດ.

ພາຍໃຕ້ລະບອບສັງຄົມນິຍົມ ການປະກອບກົນຈັກເຂົ້າໃນການຜະລິດ ມີ ຄວາມໝາຍສຳຄັນເພື່ອປັບປຸງການຜະລິດ ໃຫ້ກ້າວໜ້າກວ່າເກົ່າ. ການປະ ກອບເຄື່ອງກົນຈັກໝາຍເຖິງການນຳເອົາເຄື່ອງຈັກມາທົດແທນການອອກແຮງ ງານດ້ວຍຕົນມື. ມັນເຮັດໃຫ້ການອອກແຮງງານເບົາບາງລົງ ແລະ ມີສະມັດ ຖະພາບສູງອັນຕື່ມ ແລະ ຍູ້ໜູນໃຫ້ເສດຖະກິດສັງຄົມນິຍົມຂະຫຍາຍຕົວ ດວຍ ຈັງຫວະອັນໄວຂຶ້ນເລື້ອຍໆ.

ພາຍໃຕ້ລະບອບສັງຄົມນິຍົມ ການປະກອບກົນຈັກແບບຄົບຊຸດ ໄດ້ມີ ການ ຂະຫຍາຍຕົວຢ່າງຫລວງຫລາຍ. ມັນໝາຍເຖິງການປະກອບເຄື່ອງກົນ ຈັກ-ເຂົ້າໃນທຸກໆການຜະລິດ ທີ່ພົວພັນເຊິ່ງກັນແລະກັນ ບໍ່ວ່າຈະແມ່ນການຜະລິດອັນ ຕົ້ນຕໍ ກໍ່ຄືອັນສຳຮອງ. ການປະກອບເຄື່ອງກົນຈັກ ແບບຄົບຊຸດ ເປັນການ - ເພີ່ມທະວີສະມັດຖະພາບຂອງການອອກແຮງງານໃຫ້ສູງຂຶ້ນກວ່າເກົ່າ ແລະທັງ ເປັນການກະກຽມພື້ນຖານ ເພື່ອນຳເອົາລະບົບອັດຕະໂນມັດ ເຂົ້າໄປປະກອບ ໃນການຜະລິດ.

ການປະກອບເຄື່ອງກົນຈັກ ໃນລະດັບສູງສຸດ ແມ່ນການປະກອບລະບົບອັດ ຕະໂນມັດໝາຍຄວາມວ່າ ແມ່ນການນຳໃຊ້ເຄື່ອງຈັກ-ອັດຕະໂນມັດທີ່ ເຄື່ອນ ໄຫວເຮັດວຽກບົນພື້ນຖານການບັງຄັບບັນຊາເອົາເອງ ແລະ ທັງເປັນການລົບ ລ້າງການອອກແຮງງານ ດ້ວຍຕົນມືຢ່າງສິ້ນເຊີງອີກ. ການປະກອບລະບົບອັດ ຕະໂນມັດເຂົ້າໃນການຜະລິດສັງຄົມນິຍົມ ເຮັດໃຫ້ການອອກແຮງງານ ເບົາ ບາງລົງ ແລະ ທັງເຮັດໃຫ້ມີການປະຢັດແຮງງານ, ມັນຊ່ວຍປັບປຸງຄຸນນະ -

ພ້າບຜະລິດຕະພັນໃຫ້ດີກວ່າເກົ່າ ແລະເຮັດໃຫ້ຕົ້ນທຶນການຜະລິດຕ່ຳລົງ.ການ ກ້າວຂຶ້ນສູ່ການປະກອບລະບົບອັດຕະໂນມັດ (ເປັນຕົ້ນແມ່ນການກ້າວຂຶ້ນສູ່ການ ປະກອບລະບົບອັດຕະໂນມັດແບບຄົບວຸດເຂົ້າໃນທຸກໆການຜະລິດ) ແມ່ນ ພາ ໄປເຖິງບ່ອນມີການເພີ່ມກຳນົດເວລາຮັບໃຊ້ຂອງອຸປະກອນ ແລະ ເພີ່ມລະດັບ ຄວາມຮັບປະກັນໃນການເຮັດວຽກຂອງມັນ. ໄດ້ຮັບການຫລຸດຜ່ອນການ ໃຊ້ ຈ່າຍພະລັງງານ, ເງື່ອນໄຂໃນການຜະລິດ ກໍ່ດີຂຶ້ນຕື່ມແລະ ຈຳນວນ ກຳມະ ກອນກໍ່ຫລຸດລົງ. ທັງໝົດເຫລົ່ານີ້ ເຮັດໃຫ້ສະມັດຖະພາບຂອງການອອກແຮງ ງານໃນສັງຄົມເພີ່ມທະວີສູງຂຶ້ນຕື່ມ ຢ່າງປະຈັກຕາ.

ໂດຍກົງກັນຂ້າມກັບທຶນນິຍົມ ທີ່ເຮັດໃຫ້ກຳມະກອນເປັນລ້ານໆຄົນ ຖືກໄລ່ ອອກຈາກການ ແລະ ກາຍເປັນຜູ້ຫວ່າງງານ ພາຍຫລັງມີການປະກອບເຄື່ອງ ກົນຈັກ ແລະ ປະກອບລະບົບອັດຕະໂນມັດ ເຂົ້າໃນການຜະລິດນັ້ນ ໃນເງື່ອນ ໄຂຂອງສັງຄົມນິຍົມ ການປະກອບກົນຈັກ ແລະ ປະກອບລະບົບອັດຕະໂນ ມັດ ແມ່ນບໍ່ເຮັດ ແລະ ກໍ່ບໍ່ສາມາດຈະເຮັດໃຫ້ເກີດມີໄພຫວ່າງງານໄດ້. ຢູ່ໃນສັງ ຄົມ ສັງຄົມນິຍົມ ການປະກອບກົນຈັກແບບຄົບວຸດ ແລະ ປະກອບລະບົບອັດຕະ ໂນມັດ ເຂົ້າໃນການຜະລິດ ແມ່ນຕອບສະໜອງສິດຜົນປະໂຫຍດອັນເປັນຕາຍ ຂອງຊາວຜູ້ອອກແຮງງານ,ມັນເຮັດໃຫ້ການອອກແຮງງານຂອງຄົນເປັນລ້ານໆ ຄົນເບົາບາງລົງ ແລະ ເຮັດໃຫ້ລັກສະນະຂອງການອອກແຮງງານ ມີການ - ປ່ຽນແປງຢ່າງເຖິງກົກເຖິງຮາກ, ເຮັດໃຫ້ສະມັດຖະພາບຂອງແຮງງານສູງ-ຂຶ້ນຕື່ມ ແລະ ສ້າງເງື່ອນໄຂເພື່ອຫລຸດຜ່ອນກຳນົດເວລາຂອງວັນງານ ແລະ ລິບລ້າງບໍ່ໃຫ້ມີຄວາມແຕກຕ່າງກັນຢ່າງຫລວງຫລາຍ ລະຫວ່າງການອອກແຮງ ງານດ້ວຍມັນສະໜອງ ກັບການອອກແຮງງານດ້ວຍຮ່າງກາຍ.

ການດັດແປງເຄື່ອງມືການຜະລິດໃຫ້ກ້າວໜ້າກວ່າເກົ່າ, ການເຮັດ ໃຫ້ ການອອກແຮງງານທັນສະໄໝ ແລະ ການປະກອບເຄື່ອງກົນຈັກເຂົ້າໃນການ ອອກແຮງງານ, ການປະກອບເຄື່ອງກົນຈັກແບບຄົບວຸດ ແລະ ປະກອບ ລະ ບົບອັດຕະໂນມັດເຂົ້າໃນການຜະລິດ ແມ່ນດຳເນີນໄປບົນພື້ນຖານ ການຂະ ຫຍາຍຕົວຂອງຂະແໜງວຸດສາຫະກຳກໍ່ສ້າງເຄື່ອງຈັກ, ວຸດສາຫະກຳກໍ່ ສ້າງ ເຄື່ອງວັດແທກ ແລະ ວຸດສາຫະກຳປຸງແຕ່ງໂລຫະ. ຢູ່ ສ.ສ.ສ.ຊ ໃນ ຊ່ວໄລຍະ ๔๐ ປີ(ນັບແຕ່ປີ ๑๙๔๐ ຮອດປີ ๑๙๘๐) ບໍລິມາດລວມ ໃນ

ການຜະລິດເຄື່ອງຈັກ ແລະ ໃນການປຸງແຕ່ງໂລຫະ ໄດ້ເພີ່ມຂຶ້ນ ກ໔ ເທື່ອ. ອັນນີ້ ເປັນການເປີດຊ່ອງທາງໃຫ້ມີຄວາມອາດສາມາດອັນໃຫຍ່ຫລວງໃນການເສີມຂະຫຍາຍກຳລັງການຜະລິດ ຢູ່ໃນໜົດທຸກຂົງເຂດຂອງເສດຖະກິດ ແຫ່ງຊາດ.

ການດັດແປງເຄື່ອງມື ການຜະລິດໃຫ້ກ້າວໜ້າກວ່າເກົ່າ, ການປະກອບເຄື່ອງກົນຈັກ ແລະ ການປະກອບລະບົບອັດຕະໂນມັດເຂົ້າໃນການຜະລິດແມ່ນຕິດພັນຢ່າງສະໜິດແໜ້ນ ກັບການຕິດຕັ້ງໄຟຟ້າ. ການຕິດຕັ້ງໄຟຟ້າ ແມ່ນການນຳເອົາພະລັງງານໄຟຟ້າ ເຂົ້າໄປໃນໜົດທຸກຂະແໜງການຂອງເສດ-ຖະກິດແຫ່ງຊາດ, ເຂົ້າໃນຊີວິດປະຈຳວັນ ແລະ ໃນວັດທະນະທຳ. ພະລັງ-ງານໄຟຟ້າ ປະກອບເປັນພື້ນຖານທາງດ້ານພະລັງງານໃຫ້ແກ່ເຕັກນິກອັນທັນ-ສະໄໝ, ໃຫ້ແກ່ການປະກອບເຄື່ອງກົນຈັກ ແລະ ການປະກອບລະບົບອັດຕະ ໂນມັດ. ມັນເປັນພື້ນຖານເພື່ອດັດແປງເຕັກໂນໂລຢີ ໃຫ້ກ້າວໜ້າກວ່າ ເກົ່າ ແລະ ເພື່ອຮັດໃຫ້ການຜະລິດມີລັກສະນະແບບສຸມ. ການນຳໃຊ້ໄຟຟ້າ ຊ່ວຍ ໃຫ້ສາມາດກໍ່ສ້າງຂະແໜງການຜະລິດ ຂະແໜງໃໝ່ຂຶ້ນເຊັ່ນ: ຂະແໜງ-ການອຸດສາຫະກຳເຄມີ ດ້ວຍໄຟຟ້າ, ຂະແໜງການອຸດສາຫະກຳ ເຄມີແບບໃຊ້ໄຟຟ້າ, ກ໑໐໑ ການປຸງແຕ່ງໂລຫະ ແບບໃໝ່.

ຢູ່ ສ.ສ.ສ.ຊ ໃນປີ ໑໙໓໐ ໄດ້ມີການຜະລິດພະລັງງານໄຟຟ້າໄດ້ຮອດ ໑໘໙໕ ຕ ກິໂລວັດ-ໂມງ ແທນທີ່ຈະໄດ້ພຽງແຕ່ ໑,໙ ຕຼ ກິໂລວັດ-ໂມງ ຄື ໃນປີ ໑໙໑໓. ເພື່ອແນໃສ່ເສີມຂະຫຍາຍພະລັງແຮງທາງດ້ານພະລັງງານ - ຢ່າງເລັ່ງລັດ ໄດ້ມີການຄາດໝາຍວ່າ ຈະສ້າງສະຖານີໄຟຟ້າຂຶ້ນ : ກໍ່ສ້າງສະຖານີໄຟຟ້າແບບໃຊ້ອາຍຮ້ອນທີ່ໃຊ້ຖ່ານຫີນຂະນິດມີລາຄາຖືກໆ, ໃຊ້ ອາຍແກດ ແລະ ນ້ຳມັນດີເຊນ, ກໍ່ສ້າງເຂື່ອນໄຟຟ້ານ້ຳຕົກ ແລະ ສະຖານີ ໄຟຟ້າປະລະມານູ.

ປັດໄຈອັນແຮງກ້າ ເພື່ອປັບປຸງເສດຖະກິດແຫ່ງຊາດໃຫ້ກ້າວໜ້າກວ່າ - ເກົ່າ ທາງດ້ານເຕັກນິກນັ້ນ ແມ່ນການປະກອບເຄມີ. ການປະກອບເຄມີເຂົ້າ ໃນການຜະລິດ ໝາຍເຖິງການຂະຫຍາຍວິທີການຜະລິດແບບໃຊ້ເຄມີ ແລະ ໝາຍເຖິງການນຳເອົາເຄມີ ເຂົ້າໄປໃຊ້ຢູ່ໃນໜົດທຸກຂະແໜງການຂອງ - ເສດຖະກິດແຫ່ງຊາດ. ການເລີ່ມຕົ້ນນຳໃຊ້ເຄື່ອງທີ່ຜະລິດອອກມາຈາກອຸດສາ

ກຳຄົມີ ເປັນການເປີດໂອກາດໃຫ້ດຳເນີນ ການດັດສ້າງຢ່າງຖົງກົກ ຖົງ ຮາກຢູ່ໃນຫມົດທຸກຂະແຫນງການຂອງເສດຖະກິດ ຢູ່ໃນປະເທດ. ການປະ ກອບຄົມີເຂົ້າໃນເສດຖະກິດແຫ່ງຊາດເຊັ່ນດຽວກັນກັບການຕິດຕັ້ງໄຟຟ້າລ້ວນ ແຕ່ມີຜົນກະທົບແບບປະຕິວັດໃສ່ການຜະລິດ. ຄົມີເປີດໂອກາດໃຫ້ມີການປ່ຽນ ແປງທາດປະກອບຂອງພັດສະດຸທຳມະຊາດ, ມີການປະດິດສ້າງພັດສະດຸຊະນິດ ໃຫມ່ ທີ່ມີຄຸນນະພາບແນວບໍ່ອາດຈະມີໄດ້ໃນທຳມະຊາດ ຫມາຍຄວາມວ່າໃຫ້ມີ ການເພີ່ມຈຳນວນເຄື່ອງຮັບໃຊ້ການອອກແຮງງານຂຶ້ນຕັ້ງຫລາຍເທົ່າ, ມີການ ເພີ່ມທະວີການນຳໃຊ້ເຕັກໂນໂລຢີ ແບບສຸມ ໃນອຸດສາຫະກຳ ແລະ ໃນການ ຜະລິດກະສິກຳ.

ຜົນສຳເລັດຕ່າງໆທາງດ້ານຄົມີ ຢູ່ໃນການຜະລິດ ພັດສະດຸຊະນິດທຽມ ເປັນເງື່ອນໄຂອັນດີເພື່ອເສີມຂະຫຍາຍຂະແຫນງການເຕັກນິກອັນໃຫມ່, ພະລັງ ງານປະລະມານູ, ຮາດີໂອອເລັກໂຕຣນິກ, ເຕັກນິກແບບອາຍພົ່ນແລະອື່ນໆ ຢ່າງແຂງແຮງ. ໃນປະຈຸບັນນີ້ ຖ້າຫາກວ່າບໍ່ຫມູນໃຊ້ຄື່ອງຄົມີ ແລະ ວິທີ ການແບບຄົມີ ແມ່ນບໍ່ສາມາດຈະສືບຕໍ່ ເສີມຂະຫຍາຍການຫລອມໂລຫະ, ການກໍ່ສ້າງເຄື່ອງຈັກ, ພະລັງງານ, ການກໍ່ສ້າງ, ການກະສິກຳ, ການຂົນ ສົ່ງ, ການສື່ສານ, ສາທາລະນະສຸກ ແລະ ອື່ນໆໄດ້. ຄົມີສາດໄດ້ສ້າງ - ຄວາມອາດສາມາດອັນກວ້າງຂວາງຢ່າງບໍ່ມີຂອບເຂດຈຳກັດ ເພື່ອຈະ ຂະ- ຫຍາຍການຜະລິດສິນຄ້າ ໃຊ້ສອຍທົ່ວໄປໃຫ້ມີຄຸນນະພາບສູງຢ່າງກວ້າງຂວາງ ທີ່ສຸດ ແລະ ມີເປັນຫລາຍຊະນິດທີ່ສຸດ. ຖ້າຈະເວົ້າແບບປຽບທຽບແລ້ວ ຄົມີ ແມ່ນສາມາດບໍ່ສະເພາະພຽງແຕ່ເຮັດໃຫ້ມີຢູ່ມີກິນເທົ່ານັ້ນ ແຕ່ມັນກໍ່ຍັງສາມາດ ສະຫນອງເຄື່ອງນຸ່ງຂອງຖືອີກ ແລະ ກໍ່ທັງນຳເອົາເຄື່ອງຂອງແນວສະດວກສະ ບາຍ, ມີລາຄາຖືກ ແລະ ຮັບໃຊ້ປະຈຳວັນເປັນຈຳນວນມາກມາຍກາຍກອງ- ມາຮັບໃຊ້ຊີວິດປະຈຳວັນຂອງຄົນ.

ຢູ່ໃນໄລຍະປະຈຸບັນແຫ່ງການຂະຫຍາຍຕົວ ທາງດ້ານເຕັກນິກ ໄດ້ມີການ ເປີດກວ້າງການນຳໃຊ້ພະລັງງານປະລະມານູ ຢູ່ໃນເສດຖະກິດແຫ່ງຊາດ. ຢູ່ ສ.ສ.ສ.ຊ ໄດ້ມີການສ້າງອຸດສາຫະກຳປະລະມານູ ອັນໃຫຍ່ໂຕທີ່ມີອະນາຄົດ ອັນກວ້າງໄກ.

ນີ້ກໍ່ຄືບາງທິດທາງອັນສຳຄັນຂອງຄວາມກ້າວຫນ້າທາງດ້ານເຕັກນິກ. ສິ່ງ

ທີ່ສ່ອງແສງເຖິງພົນສຳເລັດຂອງວິທະຍາສາດ ແລະ ເຕັກນິກຂອງໂຊວຽດ ກໍ່ແມ່ນຢູ່ບ່ອນວ່າ ກະໂຕ ສ.ສ.ສ.ຊ ນັ້ນເອງທີ່ເປັນປະເທດທຳອິດໃນການສ້າງສະຖານີໄຟຟ້າປະລະມານູ ໃນການສ້າງດາວທຽມຍົນ ແລະ ໃນການສ້າງ ກຳປັ່ນຜ່ານນ້ຳກ້ອນແລ່ນດ້ວຍປະລະມານູ. ພົນສຳເລັດອັນຍິ່ງໃຫຍ່ ຂອງພວກນັກວິທະຍາສາດ ແລະ ວິສະວະກອນໂຊວຽດ ແມ່ນການສ້າງຄົນຍົນອະວະກາດເປັນເທື່ອທຳອິດ.

ພັກກອມມູນິດ ແລະ ພັກກຳມະກອນຢູ່ໃນປັນດາປະເທດສັງຄົມນິຍົມ ມີຄວາມເປັນຫ່ວງເປັນໃຍຢາກໃຫ້ຄວາມກ້າວໜ້າ ທາງດ້ານເຕັກນິກຂະຫຍາຍຕົວດ້ວຍຈັງຫວະອັນວ່ອງໄວ. ກອງປະຊຸມໃຫຍ່ຄັ້ງທີ ๔๒ ຂອງ ພ.ກ.ສ.ຊ ທີ່ໄດ້ມີຂຶ້ນໃນປີ ๑๙๖๑ ໄດ້ວາງໂຄງການອັນໃຫຍ່ໂຕມະໂຫລານສຳລັບໄລຍະ-ເວລາຮອດປີ ๑๙๗๐ ກ່ຽວກັບການນຳໃຊ້ພົນສຳເລັດຂອງການປະຕິວັດ ທາງດ້ານວິທະຍາສາດ ແລະ ເຕັກນິກເຂົ້າໃນພາກຕົວຈິງ. ກອງປະຊຸມໃຫຍ່ໄດ້ຊີ້ອອກໃຫ້ເຫັນເຖິງຄວາມຈຳເປັນທີ່ຈະຕ້ອງສຶບຕໍ່ຍົກສູງປະສິດທິພາບ ຂອງການຜະລິດ ຢູ່ໃນສັງຄົມນິຍົມ. ເພື່ອຮັດໃຫ້ທິດທາງດັ່ງກ່າວປະກົດເປັນຈິງ ຈຶ່ງໄດ້ວາງ ຄາດໝາຍໃຫ້ມີການຄົ້ນໄປໜ້າຢ່າງເລິກເຊິ່ງ ທາງດ້ານລຸ້ມນະພາບໃນການຜະລິດບົນພື້ນຖານການພັດທະນາຄວາມກ້າວໜ້າທາງດ້ານວິທະຍາ - ສາດ ແລະ ເຕັກນິກຢ່າງເລັ່ງລັດ. ອັນນີ້ໝາຍເຖິງການເສີມຂະຫຍາຍ ບັນດາຂະແໜງການທີ່ມີບົດບາດຕັດສິນຊີ້ຂາດ ກ່ຽວກັບຄວາມກ້າວໜ້າທາງດ້ານ ວິທະຍາສາດ ແລະ ເຕັກນິກໃຫ້ໄປກ່ອນກ້າວໜຶ່ງ, ການດຳເນີນນະໂຍບາຍ ເຕັກນິກເອກະພາບອັນດຽວ, ການສືບຕໍ່ຕິດຕັ້ງໄຟຟ້າ, ປະກອບເຄື່ອງກົນຈັກ ຢ່າງຄົບຊຸດ, ແລະ ປະກອບລະບົບອັດຕະໂນມັດ, ການປະກອບເຕັກນິກ ຄົ້ນໃໝ່ໃຫ້ບັນດາຂະແໜງການຜະລິດອັນເປັນພື້ນຖານ, ການໝູນໃຊ້ເຕັກນິກ , ພັດສະດຸ ແລະ ເຕັກໂນໂລຢີອັນໃໝ່ເຂົ້າໃນຕົວຈິງ, ການໝູນໃຊ້ໝາກຜົນ ຂອງການສຶກສາຄົ້ນຄວ້າທາງດ້ານວິທະຍາສາດເຂົ້າໃນການຜະລິດ ໂດຍ ໄວ ເທົ່າທີ່ຈະໄວໄດ້, ການເສີມຂະຫຍາຍການຜະລິດ ແລະ ມີການໝູນໃຊ້ - ເຄື່ອງກົນຈັກອັດຕະໂນມັດ (ເຄື່ອງກົນຈັກຊຸດສາທະກຳເຮັດວຽກຕ່ອງຄົ້ນ).

ພື້ນຖານວັດຖຸແລະເຕັກນິກ ຂອງສັງຄົມນິຍົມ

ບົນພື້ນຖານລະດັບການຂະຫຍາຍຕົວໆ ຈິງ ຂອງ ກຳລັງການຜະລິດໄດ້ຄ່ອຍໆ ມີການກໍ່ສ້າງພື້ນຖານວັດຖຸ ແລະ ເຕັກນິກ ຂອງ ສັງຄົມໂດຍສອດຄ່ອງກັບລັກສະນະຂອງການພົວພັນແຫ່ງການຜະລິດ ທີ່ ເປັນ ເຈົ້າຄອບຄອງ. ສັງຄົມນິຍົມ ມີການກໍ່ສ້າງພື້ນຖານວັດຖຸ ແລະ ເຕັກນິກຂອງ ຕົນເອງ ທີ່ຄ່ອຍໆຂະຫຍາຍຕົວໄປເປັນພື້ນຖານວັດຖຸ ແລະ ເຕັກນິກຂອງ ລະ ບອບກອມມູນິດ.

ກົກຮາກຂອງພື້ນຖານວັດຖຸ ແລະ ເຕັກນິກຂອງສັງຄົມນິຍົມ ແມ່ນການຜະ ລິດໃຫຍ່ແບບໃຊ້ເຄື່ອງຈັກ ເຄື່ອງລາງທີ່ມີການຂະຫຍາຍຕົວຢູ່ໃນຫມົດທຸກ ຂະ ແຫນງການຂອງເສດຖະກິດແຫ່ງຊາດຢ່າງມີແຜນການ ໃນເວລາທີ່ການຜະລິດ ພາຫະນະການຜະລິດມີການເຕີບໃຫຍ່ຂະຫຍາຍຕົວເປັນຈຸດຫນັກ. ການຜະລິດ ໃຫຍ່ແບບໃຊ້ເຄື່ອງຈັກເຄື່ອງລາງ ໄດ້ສ້າງເງື່ອນໄຂໃຫ້ ແກ່ການນຳໃຊ້ - ເຄື່ອງມືອອກແຮງງານ ອັນທັນສະໄຫມ, ຜົນສຳເລັດຂອງວິທະຍາສາດເຕັກ ນິກ ແລະ ເຕັກໂນໂລຢີ ທັນສະໄຫມ ຢູ່ໃນຂອບເຂດຂອງສັງຄົມ ສັງຄົມນິ- ຍົມທັງຫມົດ. ສະຫລຸບຄວາມແລ້ວ ການຜະລິດໃຫຍ່ແບບໃຊ້ເຄື່ອງຈັກ ເຄື່ອງ ລາງໄດ້ສ້າງປະຖົມປັດໄຈທາງດ້ານວັດຖຸ່ເພື່ອເຮັດໃຫ້ສະມັດຖະພາບຂອງການ ອອກແຮງງານເຕີບໃຫຍ່ຂະຫຍາຍຕົວຂໍ້ນຢ່າງບໍ່ຢຸດຢັ້ງ. ມັນສ້າງເງື່ອນໄຂໃຫ້ ສັງຄົມ ສັງຄົມນິຍົມສາມາດນຳໃຊ້ເຄື່ອງຈັກເຄື່ອງລາງເພື່ອເຮັດໃຫ້ການອອກ ແຮງງານເບົາບາງລົງ ແລະ ເຮັດໃຫ້ວັນງານສັ້ນລົງ ຈາກນີ້ມັນກໍ່ເຮັດໃຫ້ ມີ ເວລາເປົ່າຫວ່າງເພື່ອຍົກລະດັບວັດທະນະທຳ ແລະ ເຕັກນິກຂອງຜູ້ທີ່ ເຮັດ ວຽກໃນການຜະລິດຂໍ້ນຢ່າງບໍ່ຢຸດຢັ້ງ.

ຈຸດພິເສດຂອງພື້ນຖານວັດຖຸ ແລະ ເຕັກນິກຂອງສັງຄົມ ສັງຄົມນິຍົມ ຢູ່ ບ່ອນລັກສະນະເປັນຂອງສັງຄົມໃນລະດັບສູງ ຂອງການຜະລິດ, ການແບ່ງ - ເຂດຜະລິດ ແລະ ການສຳພັນການຜະລິດ. <u>ການເຕົ້າໂຮມ</u>ການຜະລິດຫມາຍ ເຖິງການລວບລວມການຜະລິດ, ແຮງງານ ແລະ ການຜະລິດເຄື່ອງຂອງໃນ ວິສາຫະກິດທີ່ມີຂະຫນາດນັບມື້ນັບໃຫຍ່ກວ່າເກົ່າ. ການຜະລິດສັງຄົມນິຍົມ ມີ ລັກສະນະເຕົ້າໂຮມໃນລະດັບສູງກວ່າຫມູ່ ໃນໂລກ. ຮູບການອັນຫນຶ່ງທີ່ ສ່ອງ ແສງເຖິງການເຕົ້າໂຮມການຜະລິດ ແມ່ນຮູບການສົມທົບການຜະລິດ.

ການສົມທົບ ການຜະລິດແມ່ນການລວບລວມເອົາຂະແໜງການແຕກຕ່າງ ກັນທີ່ຕິດພັນກັນ ທາງດ້ານເຕັກໂນໂລຢີເຂົ້າຢູ່ໃນວິສາຫະກິດຂະໜາດໃຫຍ ອັນດຽວ. ຕົວຢ່າງ, ລະບົບໂຮງງານຫລອມໂລຫະຢູ່ມັກນີໂຕກອກ ທີ່ ກວມ ເອົາທັງໝົດຮອບການຜະລິດຫລອມໂລຫະ. ມັນປະກອບດ້ວຍຂະແໜງ ການ ຫລອມໂລຫະຂະໜາດຍັກ, ມີວິສາຫະກິດຢູ່ໃນຂະແໜງການຂຸດຄົ້ນແຮ, ຂະ ແໜງການຜະລິດຖ່ານກ໊ກແບບໃຊ້ເຄມີ, ຂະແໜງການຂຸດສາຫະກຳ ຜະລິດ ເຄື່ອງຂອງທີ່ທົນທານຕໍ່ໄຟ ແລະ ຂະແໜງການອື່ນໆອີກທີ່ປະກອບເຂົ້າຢູ່ໃນ-ພາກສ່ວນລະບົບໂຮງງານດັ່ງກ່າວນີ້. ລະບົບໂຮງງານແມ່ນລະບົບເອກະພາບ ແບບກາຍອິນຊີ ທາງດ້ານເຕັກນິກ ແລະ ດ້ານການຜະລິດ. ແບບຢ່າງ ໃນ ການສົມທົບການຜະລິດ ແມ່ນລະບົບໂຮງງານຂຸດສາຫະກຳເຄມີສາດປຸງ ແຕ່ງ ນ້ຳມັນດິບ ທີ່ຮັບປະກັນການປຸງແຕ່ງນ້ຳມັນດິບແບບໃຊ້ເຄມີຢ່າງຄົບຊຸດເຊັ່ນ : ການຜະລິດເຊື້ອເພີ້ງສຳລັບໂມເຕີ, ນ້ຳມັນຫລໍ່ລື່ນ, ຢາງກະຕ້ອທຽມ, ເຫຼົ້າ ໝ, ອາຊິດ, ອາເຊໂຕນ, ປລາສຕິກ ແລະ ການຜະລິດທາງດ້ານເຄມີອື່ງ ຄະທາດຊະນິດອື່ນໆ. ນອກນັ້ນ ຍັງມີການສົມທົບການຜະລິດຢູ່ໃນຂະແໜງ - ການຂຸດສຸາຫະກຳປຸງແຕ່ງເຈຍ, ຂຸດສາຫະກຳປຸງແຕ່ງອາຫານ, ຂຸດສາຫະ-ກຳຕຳແໜ ແລະ ຂຸດສາຫະກຳຂະແໜງການອື່ນໆອີກ.

ໜຶ່ງໃນບັນດາຈຸດພິເສດອັນເດັ່ນຊັດຂອງພື້ນຖານວັດຖຸ ແລະ ເຕັກນິກ - ຂອງສັງຄົມນິຍົມ ແມ່ນການແບ່ງເຂດການຜະລິດຢ່າງກວ້າງຂວາງ ແລະຢ່າງ ມີແຜນການ ແລະ ການສຳພັນການຜະລິດລະຫວ່າງວິສາຫະກິດ. ການແບ່ງ-ເຂດການຜະລິດ ແມ່ນການແຍກຕົວອອກຕ່າງຫາກຂອງວິສາຫະກິດໃດທີ່ມີອຸປະ ກອນແລະມີເຕັກໂນໂລຢີແບບສະເພາະ, ມີພະນັກງານວິຊາສະເພາະທີ່ ກຽວ ຂອງ ແລະ ມີການຜະລິດເຄື່ອງສຳເລັດຮູບໃດໜຶ່ງ ສະເພາະເຈາະຈົງ ຫລື ພາກສ່ວນໜຶ່ງຂອງເຄື່ອງສຳເລັດຮູບ.

ການແບ່ງເຂດການຜະລິດ ແມ່ນອີງໃສ່ການແບ່ງງານລະຫວ່າງວິສາຫະ-ກິດໃດໜຶ່ງ ສະເພາະນຳກັນ. ຢູ່ໃນວິສາຫະກິດ ບ່ອນໃດທີ່ມີການແບ່ງ ເຂດ ການຜະລິດແມ່ນມີຄວາມອາດສາມາດອັນໃຫຍ່ຫລວງກວ່າເກົ່າ ໃນການນຳໃຊ້ ອຸປະກອນຊະນິດທີ່ມີສະມັດຖະພາບສູງ, ເລີ່ມຕົ້ນໃຊ້ລະບົບມາດຕະຖານ ແລະ ການຜະລິດແບບເປັນສາຍໂສ້ຢ່າງກວ້າງຂວາງບົນພື້ນຖານການປະກອບລະບົບ

ອັດຕະໂນມັດແບບຄົບວຸດ ແລະ ການປະກອບເຄື່ອງກົນຈັກເຂົ້າໃນການຜະລິດ. ຍ້ອນມີການແບ່ງເຂດການຜະລິດຈຶ່ງໄດ້ມີການຮັບປະກັນເຮັດໃຫ້ສະມັດຖະພາບຂອງການອອກແຮງງານ ເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ, ເຮັດໃຫ້ ລຸມ ນະພາບຂອງການຜະລິດຖືກປັບປຸງໃຫ້ດີຂຶ້ນກວ່າເກົ່າ ແລະ ເຮັດໃຫ້ມີການຈັດ ຕັ້ງການອອກແຮງງານແບບຖືກຕ້ອງເໝາະສົມ.

ວິສາຫະກິດທີ່ລົງເລິກໃນການແບ່ງເຂດການຜະລິດ ຮຽກຮ້ອງໃຫ້ມີ ສາຍ ພົວພັນຢ່າງໃກ້ຊິດ ມໍາກັນໃນການຜະລິດ. ສາຍພົວພັນອັນນີ້ ແມ່ນດໍາເນີນໄປ ໂດຍຜ່ານການສໍາພັນການຜະລິດ. <u>ການສໍາພັນ</u> ການຜະລິດ ແມ່ນການຈັດ - ວາງໃຫ້ມີສາຍພົວພັນໃນການຜະລິດນໍາກັນຢ່າງເປັນປະຈໍາ ລະຫວ່າງວິສາຫະ ກິດທີ່ສົມທົບກັນຜະລິດເຄື່ອງອັນໃດໜຶ່ງສະເພາະເຈາະຈົງ ແຕ່ຫາກມີ ຄວາມ ເປັນເອກະລາດທາງດ້ານເສດຖະກິດຕໍ່ກັນ.

ການສໍາພັນພາຍໃນເຂດໝາຍເຖິງ ວິສາຫະກິດທີ່ມີສາຍພົວພັນການ ຜະ ລິດນໍາກັນ ຢູ່ໃນຂອບເຂດຂອງເຂດເສດຖະກິດແຫ່ງໜຶ່ງ ແລະ ມັນກໍມີການ-ສໍາພັນລະຫວ່າງເຂດນໍາກັນ ໃນເມື່ອມີສາຍພົວພັນ ການຜະລິດນໍາກັນ ລະ ຫວ່າງວິສາຫະກິດທີ່ຕັ້ງຢູ່ເຂດເສດຖະກິດຕ່າງກັນ.

ຮູບການຫັນປ່ຽນການຜະລິດ ສັງຄົມນິຍົມ ເປັນຂອງສັງຄົມດັ່ງກ່າວ ມາ ຂ້າງເທິງນີ້ ລ້ວນແຕ່ມີລັກສະນະລວມ ສໍາລັບໜົດທຸກຂະແໜງການຜະລິດສັງ ຄົມນິຍົມ ຊຶ່ງໃນນັ້ນມີທັງການກະສິກໍາ. ລະບົບກະສິກໍາແບບມີຫລາຍຂະແໜງ ການ ແມ່ນຕິດພັນຢ່າງສະໜິດແໜ້ນກັບການແບ່ງເຂດການຜະລິດ.

ມັນມີການແບ່ງເຂດການຜະລິດແລະການສໍາພັນການຜະລິດ ບໍ່ສະເພາະ-ພຽງແຕ່ຢູ່ໃນຂອບເຂດຂອງປະເທດໜຶ່ງປະເທດດຽວເທົ່ານັ້ນ ແຕ່ພັດມີທັງລະ ຫວ່າງບັນດາປະເທດສັງຄົມນິຍົມນໍາກັນອີກ.

ລັກສະນະພິເສດຂອງພື້ນຖານວັດຖຸ ແລະ ເຕັກນິກຂອງສັງຄົມນິຍົມ ແມ່ນ ການມີເຕັກນິກໃນລະດັບສູງ ຢູ່ໃນໜົດທຸກຂະແໜງການຂອງເສດຖະກິດແຫ່ງ ຊາດ ຊຶ່ງໄດ້ມາຈາກຄວາມກ້າວໜ້າທາງດ້ານວິທະຍາສາດ-ເຕັກນິກ. ຢູ່ໃນ ລະບົບເສດຖະກິດສັງຄົມນິຍົມ ມີການນໍາເອົາເຄື່ອງຈັກເຄື່ອງລາງເຂົ້າມາໃຊ້ ຢູ່ໃນທຸກໆກໍລະນີ ທີ່ເປັນຜົນດີໃຫ້ແກ່ສັງຄົມ ໝາຍຄວາມວ່າ ທີ່ເຮັດໃຫ້ມີການ ປະຢັດແຮງງານ ແລະ ເຮັດໃຫ້ການອອກແຮງງານຂອງຄົນເບົາບາງລົງ.

ວິສາຫະກິດສັງຄົມນິຍົມ ຂະຫນາດໃຫຍ່ ທີ່ສ້າງຂຶ້ນບົນພື້ນຖານເຕັກນິກໃນ ລະດັບສູງ ແມ່ນເບື້ອງຫນຶ່ງຂອງກຳລັງການຜະລິດຂອງສັງຄົມ ສັງຄົມນິຍົມ . ພາກສ່ວນສຳຄັນອັນຫນຶ່ງອີກ ຂອງກຳລັງການຜະລິດຂອງສັງຄົມ ກໍ່ແມ່ນຄົນທີ່ມີ ບົດຮຽນໃນການອອກແຮງງານ.

ຊາວຜູ້ອອກແຮງງານ ແມ່ນກຳລັງ ການຜະລິດອັນຕົ້ນຕໍຢູ່ໃນ ສັງຄົມ ຜ່ານການຜະລິດວັດຖຸສິ່ງຂອງຕ່າງໆ ຄົນດັດແປງເຄື່ອງມືອອກແຮງ ງານ ໃຫ້ກ້າວຫນ້າກວ່າເກົ່າ. ພວກເຂົາ ເຈົ້າມີການປະດິດຄິດແຕ່ງເຄື່ອງຈັກເຄື່ອງລາງ ແລະ ບຸກເບີກຊັບພະຍາກອນ ທຳມະຊາດ. ແຕ່ພ້ອມກັນນັ້ນ ພວກເຂົາເຈົ້າກໍ່ໄດ້ເພີ່ມຄວາມອຸດົມຮັ່ງມີໃຫ້ແກ່ ບົດຮຽນໃນການຜະລິດ ແລະ ຄວາມຮູ້ທາງດ້ານເຕັກນິກຂອງຕົນ ແລະ ກໍ່ໄດ້ ເສີມຂະຫຍາຍມັນໃຫ້ກ້າວຫນ້າກວ່າເກົ່າ. ມີແຕ່ຄົນເທົ່ານັ້ນ ທີ່ຈະເຮັດ ໃຫ້ ເຄື່ອງຈັກມີການເຫນັງຕີງເຄື່ອນໄຫວໄດ້. ຈາກນີ້ ຄົນຈົ່ງມີບົດບາດຕັດສິນ ຊີ້ ຂາດ ຢູ່ໃນການຂະຫຍາຍການຜະລິດ. ຄືດັ່ງ ວ.ອີ.ເລນິນ ໄດ້ເວົ້າມາ ນັ້ນ ກຳລັງການຜະລິດອັນທຳອິດຂອງ ມວນມະນຸດ ທັງຫມົດແມ່ນກຳມະກອນ , ແມ່ນຊາວຜູ້ອອກແຮງງານ. ການຜະລິດໃຫຍ່ແບບໃຊ້ເຄື່ອງຈັກເຄື່ອງລາງ - ແລະ ຄວາມກ້າວຫນ້າທາງດ້ານເຕັກນິກຢູ່ໃນຫມົດທຸກຂະແຫນງການຂອງເສດ ຖະກິດແຫ່ງຊາດ ຮຽກຮ້ອງ ໃຫ້ມີກຳມະກອນຜູ້ນັບມື້ນັບມີ ຄວາມຊຳນິຊຳນານ ແລະ ມີຄວາມຮູ້ຢ່າງເປັນຂະບວນ. ສັງຄົມ ສັງຄົມນິຍົມມີຄວາມສົນໃຈ ຢາກ ໃຫ້ລະດັບຄວາມຊຳນິຊຳນານກໍ່ຄືລະດັບວັດທະນະທຳຂອງປະຊາຊົນ ເພີ່ມທະວີ ສູງຂຶ້ນຢ່າງເປັນລະບົບ. ການກໍ່ສ້າງກຳມະກອນຜູ້ມີຄວາມຊຳນິຊຳນານ ຢ່າງ ເປັນຂະບວນແບບມີແຜນການຢູ່ ສ.ສ.ສ.ຊ ແມ່ນດຳເນີນໄປໂດຍຜ່ານລະບົບ ໂຮງຮຽນວິຊາຊີບເຕັກນິກຊັ້ນຕົ້ນ. ໃນແຕ່ລະປີ ຢູ່ໃນບັນດາວິສາຫະກິດການກໍ່ ສ້າງກຳມະກອນຜູ້ມີຄວາມຊຳນິຊຳນານໂດຍຜ່ານບັ້ນອົບຮົມ ແລະ ໂຮງຮຽນ- ຊະນິດຕ່າງໆ ກໍ່ຄືດ້ວຍວິທີການຮຳຮຽນຢູ່ໃນຫນ່ວຍການຜະລິດ ຫລືຮຳຮຽນ - ດ້ວຍຕົນເອງນັ້ນ ກໍ່ຍົ່ງມີການເຕີບໃຫຍ່ຂະຫຍາຍຕົວຂຶ້ນຕື່ມ. ພາກສ່ວນ ໃຫຍ່ ຂອງຊາວຫນຸ່ມທີ່ເຮັດວຽກງານແມ່ນພາກັນຮຽນວິຊາສະເພາະ ແລະ ຮຽນ ຢູ່ ໃນລະບົບສາມັນສຶກສາ ຢູ່ຕາມໂຮງຮຽນພາກຄຳ, ໂຮງຮຽນຊັ້ນກາງ ແລະ

ໂຮງຮຽນຊັ້ນສູງ. ການປະຕິບັດຫລັກການໃຫ້ຫມົດທຸກຄົນມີລະດັບວັດທະນະທຳ ຂັ້ນອຸດົມຢ່າງຂາດບໍ່ໄດ້ ມີຄວາມຫມາຍສຳຄັນຢ່າງຫລວງຫລາຍເພື່ອປັບປຸງ - ວຽກງານກໍ່ສ້າງພະນັກງານຜູ້ມີຄວາມຊຳນິຊຳນານ ແລະ ມີຄວາມຮູ້ສູງຢູ່ ສ.ສ.ສ.ຊ ໃຫ້ໄດ້ ດີກວ່າເກົ່າ.

ສັງຄົມນິຍົມ ແມ່ນຮັບປະກັນໃຫ້ຊາວຜູ້ອອກແຮງງານຫມົດທຸກຄົນມີ ລະດັບ ສູງທາງດ້ານວັດທະນະທຳ ແລະ ເຕັກນິກ. ສິ່ງດັ່ງກ່າວນີ້ໄດ້ສະແດງຕົວອອກ ໃນການປ່ຽນແປງ ພາກສ່ວນປະກອບທາງດ້ານວິຊາສະເພາະ ແລະໃນການ ເພີ່ມທະວີລະດັບການສຶກສາຮຳ່ຮຽນຂອງຊາວຜູ້ອອກແຮງງານຂັ້ນຕົ່ມ.ມາຮອດ ປີ ຈຈຜ້ວ ຈຳນວນລວມຂອງນັກວິຊາການຊັ້ນສູງ ແລະ ຊັ້ນກາງທີ່ເຮັດວຽກຢູ່ ໃນຂົງເຂດເສດຖະກິດແຫ່ງຊາດຂອງ ສ.ສ.ສ.ຊ (ນັບທັງພວກນັກວິຊາການ ຢູ່ນາລວມ)ໄດ້ມີຮອດ ໔ໝ,ຄ ລ້ານຄົນ ເມື່ອສົມທຽບໃສ່ ຈຈວ ພັນຄົນໃນປີ ຈຈຈນ.

ການຂະຫຍາຍຕົວຂອງການຜະລິດໃຫຍ່ ແບບໃຊ້ເຄື່ອງຈັກເຄື່ອງລາງໄດ້ ເຮັດໃຫ້ຊົນຊັ້ນກຳມະກອນເຕີບໃຫຍ່ຂະຫຍາຍຕົວ ທາງດ້ານຈຳນວນ.ຖ້າຫາກ ວ່າໃນປີ ຈຈ໔ຜ ພວກກຳມະກອນ ແລະ ພາລະກອນຢູ່ ສ.ສ.ສ.ຊ ໄດ້ມີຈຳ ນວນ ຈວ,ຜ ລ້ານຄົນ ແຕ່ໃນປີ ຈຈຜ້ວ ຈຳນວນດັ່ງກ່າວໄດ້ເພີ່ມຂັ້ນ ຮອດ ຈຈ໔,ຄ ລ້ານຄົນ.

ລະບອບສັງຄົມນິຍົມ ພາໃຫ້ເກີດມີການເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ເຄີຍ ມີມາກ່ອນຂອງຄວາມຕັ້ງຫນ້າຫ້າວຫັນ ແບບປະດິດສ້າງ ຢູ່ໃນຫມູ່ມວນຊົນຢ່າງ ກວ້າງຂວາງ. ພາຍໃຕ້ລະບອບສັງຄົມນິຍົມໃນເວລາາເຮັດວຽກຮັບໃຊ້ ຕົນ ເອງ ແລະ ຮັບໃຊ້ສັງຄົມນັ້ນ ຊາວຜູ້ອອກແຮງງານແຕ່ລະຄົນ ມີຄວາມສົນໃຈ ຢາກເພີ່ມທະວີປະສິດທິພາບຂອງການອອກແຮງງານ ແລະ ເສີມຂະຫຍາຍກຳ ລັງການຜະລິດຢ່າງບໍ່ຢຸດຢັ້ງ ແລະ ຢ່າງວ່ອງໄວ.

໔. ການພົວພັນແຫ່ງການຜະລິດແບບສັງຄົມນິຍົມ

ການພົວພັນແຫ່ງການຜະລິດ ແບບສັງຄົມນິຍົມ ແມ່ນແຕກຕ່າງກັນໂດຍພື້ນ ຖານກັບການພົວພັນແຫ່ງການຜະລິດຂອງທຶນນິຍົມ ແລະ ຂອງລະບອບ ສັງຄົມ

ອື່ນໆ ທີ່ຕັ້ງຢູ່ບົນພື້ນຖານກຳມະສິດສ່ວນຕົວ ກ່ຽວກັບພາຫະນະການຜະລິດ .

ພື້ນຖານຂອງການພົວພັນແຫ່ງການຜະລິດ ແບບສັງຄົມນິຍົມ

ແມ່ນກຳມະສິດລວມໝູ່ ກ່ຽວກັບພາຫະນະແຫ່ງການຜະລິດທີ່ເປັນເຈົ້າຄອບຄອງຢ່າງຂາດຂັ້ນຢູ່ໃນໝົດທຸກຂະແໜງການຂອງເສດຖະກິດແຫ່ງຊາດ ທີ່ປະກອບເປັນພື້ນຖານຂອງການພົວພັນແຫ່ງການຜະລິດແບບສັງຄົມນິຍົມ.

ຢູ່ໃນ "ຖະແຫລງການຂອງພັກກອມມູນິດ " ມາກ ແລະ ອ້ງແກນ ໄດ້ຂຽນໄວ້ວ່າ: "ລັກສະນະພິເສດອັນສະເພາະເຈາະຈົ້ງຂອງສັງຄົມກອມມູນິດບໍ່ແມ່ນການຍົກເລີກ ບໍ່ໃຫ້ມີກຳມະສິດເອົ້າລວມ ແຕ່ມັນຫາກແມ່ນການ ຍົກເລີກ ບໍ່ໃຫ້ມີກຳມະສິດແບບທຶນນິຍົມ "๑)

ລັກສະນະຕິດພັນກັນ ລະຫວ່າງຜູ້ອອກແຮງງານ ກັບພາຫະນະການຜະລິດ ມີບົດບາດຕັດສິນຊີ້ຂາດຢູ່ໃນລະບົບການພົວພັນແຫ່ງການຜະລິດ. ພາຍໃຕ້ ລະບອບທຶນນິຍົມ ມີການຂັດແຍ່ງກັນແບບປໍລະປັກ ລະຫວ່າງພາຫະນະການ ອອກແຮງງານກັບຜູ້ທີ່ອອກແຮງງານ ຍອມວ່າພາຫະນະການຜະລິດ ເປັນກຳມະສິດສ່ວນຕົວຂອງພວກນາຍທຶນ, ພາຫະນະແຫ່ງການຜະລິດ ແລະ ຜູ້ອອກແຮງ - ງານ ຕິດພັນກັນຜ່ານການ ຊື້-ຂາຍ ແຮງງານທີ່ໝາຍເຖິງການເອົາຊາວຜູ້ອອກແຮງງານມາເປັນຂ້ອຍຂ້າ ແລະ ການກົດຂີ່ຂູດຮີດພວກເຂົາເຈົ້າ.ຍອມແນ່ນ ຊາວຜູ້ອອກແຮງງານຢູ່ໃນລະບອບທຶນນິຍົມ ຈົ່ງດຳເນີນການຕໍ່ສູ້ຢ່າງບໍ່ຮູ້ອ່ອນເພຍ ເພື່ອລົບລ້າງກຳມະສິດສ່ວນຕົວ.

ຢູ່ໃນສັງຄົມສັງຄົມນິຍົມ ຊາວຜູ້ອອກແຮງງານ ບໍ່ມີການຂັດແຍ່ງແບບປໍລະປັກນຳກັນກັບພາຫະນະການຜະລິດ, ພວກເຂົາເຈົ້າເປັນເຈົ້າຂອງ ພາຫະນະການຜະລິດ. ຍອມແນ່ນ ພາຍໃຕ້ລະບອບສັງຄົມນິຍົມ ຊາວຜູ້ອອກແຮງງານ ຈົ່ງມີຄວາມສົນໃຈໃນການປັບປຸງ ແລະ ເສີມຂະຫຍາຍກຳມະສິດລວມໝູ່ແບບສັງຄົມນິຍົມ ໃຫ້ເຂັ້ມແຂງຢ່າງສູດຍິດ.

ຈຸດພິເສດສະເພາະຂອງກຳມະສິດລວມໝູ່ ແບບສັງຄົມນິຍົມ ກ່ຽວກັບພາ

---

๑) ກ.ມາກ ແລະ ฝ.ອ້ງແກນ. ບົດນິພົນ, ເຫລັ້ມ ๔, ໜ້າ ๔๗๒.

ຫະນະການຜະລິດ ສະແດງອອກຢູ່ບ່ອນໃດ ? ກ່ອນອື່ນຫມົດ ມັນຫມາຍຄວາມວ່າ ພາຫະນະການຜະລິດ ແມ່ນເປັນກຳມະສິດຂອງຊາວຜູ້ອອກແຮງງານ, ບໍ່ເປັນຂອງນາຍທຶນ ແລະ ບໍ່ເປັນພາຫະນະເພື່ອຂູດຮີດອີກແລ້ວ.

ກຳມະສິດລວມຫມູ່ແບບສັງຄົມນິຍົມ ກ່ຽວກັບພາຫະນະການຜະລິດ ກຳນົດທັງລັກສະນະທີ່ກ່ຽວຂ້ອງຂອງການພົວພັນລະຫວ່າງຄົນຕໍ່ຄົນຜ່ານການຜະລິດ , ການແລກປ່ຽນ ແລະ ການແຈກຢາຍ. ຈຸດພິເສດສະເພາະຂອງການພົວພັນ-ດັ່ງກ່າວນີ້ ແມ່ນການຮ່ວມມືຖານມິດສະຫາຍນຳກັນ ແລະ ການຊ່ວຍເຫລືອຊຶ່ງກັນ ແລະ ກັນແບບສັງຄົມນິຍົມ ລະຫວ່າງຄົນຜູ້ທີ່ໄດ້ຮັບການປົດປ່ອຍອອກຈາກການຂູດຮີດ, ແມ່ນການແຈກຢາຍເຄື່ອງຂອງໃຫ້ສອດຄ່ອງກັບສິດຜົນປະໂຫຍດຂອງກະໂຕຊາວຜູ້ອອກແຮງງານເອງ ໂດຍປະຕິບັດຫລັກການທີ່ວ່າ "ແຕ່ລະ-ຄົນຊົມໃຊ້ຕາມແຮງງານຂອງຕົນ ".

ໃນຕົວຈິງແລ້ວ ໃນເມື່ອພາຫະນະການຜະລິດ ຫາກເປັນກຳມະສິດ ຂອງກະໂຕຊາວຜູ້ອອກແຮງງານເອງ, ໃນເມື່ອແຕ່ລະຄົນໃນສັງຄົມເວົ້າສະເພາະ ແລະທັງຫມົດສັງຄົມເວົ້າລວມ ຫາກມີສິດຜົນປະໂຫຍດໃນການເພີ່ມທະວີ ການຜະລິດ ແລະ ໃນການດັດແປງມັນໃຫ້ກ້າວຫນ້າກວ່າເກົ່າແລ້ວ ໃນເມື່ອ ນັ້ນ ການພົວພັນລະຫວ່າງຄົນນຳກັນຈຶ່ງກາຍມາເປັນການພົວພັນແບບເພື່ອນມິດ.ຄົນຊ່ວຍເຫລືອຊຶ່ງກັນແລະກັນດ້ວຍທຸກວິຖີທາງ. ຄວາມເປັນເອກະພາບກັນ ລະຫວ່າງສິດຜົນປະໂຫຍດຂອງຊົນຊັ້ນກຳມະກອນ, ຂອງຊົນຊັ້ນຊາວນາ, ຂອງປັນຍາຊົນ ແລະ ຂອງຫມົດທຸກຄົນຢູ່ໃນສັງຄົມ ຂອງຜູ້ທີ່ໄດ້ຮັບການປົດປ່ອຍ - ອອກຈາກການຂູດຮີດທັງຫມົດເຫລົ່ານີ້ ແມ່ນພື້ນຖານທີ່ເປັນບ່ອນອີງໃຫ້ແກ່ການຮ່ວມມືກັນຖານສະຫາຍ ແລະ ໃຫ້ແກ່ການຊ່ວຍເຫລືອຊຶ່ງກັນແລະກັນ ແບບສັງຄົມນິຍົມ. ການພົວພັນແບບນີ້ ເປັນຮູບເປັນຮ່າງຂຶ້ນມາຢູ່ພາຍໃນວິສາຫະກິດ, ລະຫວ່າງວິສາຫະກິດນຳກັນ, ລະຫວ່າງວິສາຫະກິດຂອງລັດ ກັບບັນດານາ - ລວມ, ລະຫວ່າງຊົນຊັ້ນກຳມະກອນກັບຊົນຊັ້ນຊາວນາ ແລະ ອື່ນໆ.

ການພົວພັນແບບຮ່ວມມືນຳກັນຖານສະຫາຍ, ແບບຊ່ວຍເຫລືອຊຶ່ງກັນແລະກັນ, ແລະແບບຕັ້ງຫນ້າຫ້າວຫັນໂດຍທົ່ວໄປ ຂອງຄົນ ລ້ວນແຕ່ໄດ້ສາງຄວາມອາດສາມາດອັນກວ້າງຂວາງຢ່າງບໍ່ມີຂອບເຂດຈຳກັດ ເພື່ອເສີມຂະຫຍາຍກຳລັງການຜະລິດ.

ຂໍ້ຂັດແຍ່ງແບບປໍລະປັກນຳກັນ ລະຫວ່າງລັກສະນະການຜະລິດ ເປັນຂອງສັງຄົມ ກັບຮູບການກອບໂກຍຫມາກຜົນການຜະລິດແບບສ່ວນຕົວນັ້ນ ແມ່ນຈຸດພິເສດຂອງທຶນນິຍົມ. ຢູ່ພາຍໃຕ້ລະບອບສັງຄົມນິຍົມ ຂໍ້ຂັດແຍ່ງດັ່ງກ່າວນີ້ໄດ້ຖືກລົບລ້າງຢ່າງສິ້ນເຊີງ. ຢູ່ໃນລະບອບສັງຄົມນິຍົມ ລັກສະນະການຜະລິດທີ່ເປັນຂອງສັງຄົມ ແມ່ນສອດຄ່ອງກັບການໄດ້ຮັບຜົນ ຈາກການອອກແຮງງານ ແບບລວມຫມູ່. ຍ້ອນເຫດຜົນແນວນີ້ ການພົວພັນແຫ່ງການຜະລິດ ແບບສັງຄົມນິຍົມ ຈຶ່ງສ້າງເງື່ອນໄຂອັນກວ້າງຂວາງ ເພື່ອເສີມຂະຫຍາຍກຳລັງການຜະລິດຢ່າງເນືອງນິດລຽນຕິດດ້ວຍຈັງຫວະອັນວ່ອງໄວ.

ຜ່ານການຂະຫຍາຍຕົວຂອງກຳລັງການຜະລິດ ການພົວພັນແຫ່ງການ ຜະລິດແບບສັງຄົມນິຍົມ ໄດ້ມີການດັດແປງໃຫ້ກ້າວຫນ້າຂຶ້ນ ແລະ ກໍ່ຄ່ອຍໆມີການປຽນແປງ. ແຕ່ກະໂຕການພົວພັນແຫ່ງການຜະລິດເອງ ກໍ່ບໍ່ແມ່ນຈະຢູ່ ແບບເສີຍເມີຍ ຖ້າຈະປຽບໃສ່ກຳລັງການຜະລິດ. ໃນເວລາທີ່ມັນມີການດັດແປງ-ໃຫ້ກ້າວຫນ້າ ມັນກໍ່ຮັບປະກັນໃຫ້ມີເງື່ອນໄຂອັນກວ້າງຂວາງ ເພື່ອເສີມຂະ-ຫຍາຍກຳລັງການຜະລິດ.

ສອງຮູບການກຳມະສິດ ແບບສັງຄົມນິຍົມ	ຄືດັ່ງໄດ້ເວົ້າມາແລ້ວ ຢູ່ຂ້າງເທິງນີ້ກຳມະສິດ ແບບສັງຄົມນິຍົມ ແມ່ນກຳເນີດເກີດຂຶ້ນ ຢູ່ໃນ ສະໄຫມຂ້ານຜ່ານ ຈາກທຶນນິຍົມໄປສູ່ສັງຄົມນິ

ຍົມ.

ພາຍຫລັງທີ່ຊາວຜູ້ອອກແຮງງານໄດ້ກຳເອົາອຳນາດທາງດ້ານການເມືອງແລ້ວ ພວກເຂົາເຈົ້າໄດ້ໂອນເອົາກຳມະສິດແບບທຶນນິຍົມຂະຫນາດໃຫຍ່ ມາເປັນຂອງລັດ: ກຳມະສິດອັນນີ້ ເລີຍເລື່ອນເຂົ້າມາຢູ່ໃນກຳມືຂອງລັດສັງຄົມນິຍົມ. ກຳມະສິດແບບສັງຄົມນິຍົມ ໄດ້ເກີດຂຶ້ນມາຄືແນວນີ້ໆແລ້ວ. ໃນ ເງື່ອນໄຂຂອງທຶນນິຍົມ ໄປຄຽງຄູ່ກັບກຳມະສິດແບບທຶນນິຍົມຂະຫນາດໃຫຍ່ແລ້ວ ມັນກໍ່ຍັງມີທັງກຳມະສິດສ່ວນຕົວຂະຫນາດນ້ອຍຂອງພວກຊາວນາ, ຊາວຫັດຖະ - ກອນ, ພວກນາຍຊ່າງ ຊຶ່ງຕັ້ງຢູ່ບົນພື້ນຖານຂອງການອອກແຮງງານສ່ວນ ຕົວສະເພາະຂອງພວກເຂົາເຈົ້າ. ຜ່ານການກໍ່ສ້າງສັງຄົມນິຍົມ ຜູ້ທີ່ຜະລິດສິນຄ້າ ຂະຫນາດນ້ອຍ ແລະ ຂະຫນາດກາງໄດ້ພາກັນສະຫມັກໃຈທ້ອນໂຮມ ກັນເຂົ້າ

ເປັນສະຫະກອນການຜະລິດ ແລະ ກຳມະສິດຂອງພວກເຂົ້າເຈົ້າ ກໍ່ໄດ້ມີການ ຫັນປ່ຽນໄປເປັນຂອງສັງຄົມ ບົນພື້ນຖານຫລັກການລວມໝູ່ ແບບສະຫະກອນ. ກຳມະສິດຂອງສະຫະກອນ ນາລວມ ແມ່ນໄດ້ມີການກຳເນີດເກີດຂຶ້ນຄືແນວ ນັ້ນເອງ.

ສະຫລຸບໄດ້ວ່າ ພາຍໃຕ້ລະບອບສັງຄົມນິຍົມ ໄດ້ມີກຳມະສິດລວມໝູ່ຢູ່ໃນ ສອງຮູບການຄື: ๑) ຮູບການເປັນກຳມະສິດຂອງລັດ (ຂອງທົ່ວປວງຊົນ) ໝາຍຄວາມວ່າ ເປັນກຳມະສິດຂອງປະຊາຊົນທັງຊາດ ແລະ ๒) ຮູບ ການ ເປັນກຳມະສິດ ຂອງສະຫະກອນ - ນາລວມ ໝາຍຄວາມວ່າ ເປັນກຳມະ ສິດຂອງນາລວມ ແລະ ສະຫະກອນອັນໃດອັນໜຶ່ງໂດຍສະເພາະ.

ເຂົ້າຢູ່ໃນພາກສ່ວນກຳມະສິດຂອງລັດ ກໍ່ຍັງມີຊັບສົມບັດອັນຈຳເປັນສຳລັບ ບັນດາອົງການຈັດຕັ້ງກຳມະບານ ແລະ ຂອງອົງການຈັດຕັ້ງມະຫາຊົນອື່ນໆອີກ ເພື່ອແມ່ໃສ້ຮັບໃຊ້ການປະຕິບັດບັນດາໜ້າທີ່ທີ່ໄດ້ບົ່ງອອກຢູ່ໃນກົດລະບຽບຂອງ ອົງການຈັດຕັ້ງດັ່ງກ່າວ.

ການມີສອງຮູບການກຳມະສິດແບບສັງຄົມນິຍົມນີ້ ໄດ້ກຳນົດໃຫ້ມີສອງ ຮູບ ການອົງສາທະກິດສັງຄົມນິຍົມ ທີ່ມີທາດແທ້ທາງສັງຄົມອັນດຽວກັນ: ນັ້ນກໍ່ຄືອົງສາ ທະກິດຂອງລັດ ແລະ ອົງສາທະກິດແບບສະຫະກອນ ແລະ ນາລວມ.

ຢູ່ໃນໝົດທຸກປະເທດສັງຄົມນິຍົມ ຮູບການກຳມະສິດທີ່ແຜ່ຂະຫຍາຍ ກວ່າ ໝູ່ ແລະ ມີລັກສະນະນຳໜ້າ ແມ່ນຮູບການກຳມະສິດຂອງລັດ (ຂອງທົ່ວ - ປວງຊົນ).

ຢູ່ ສ.ສ.ສ.ຊ ຖືວ່າແມ່ນກຳມະສິດຂອງລັດ (ຂອງທົ່ວປວງຊົນ) ມີດິນ ດອນ, ພູນດິນ, ແມ່ນ້ຳລຳເຊ, ປ່າໄມ້, ໂຮງຈັກ, ໂຮງງານ, ບ່ອນ ຊຸດ ຄົ້ນບໍ່ແຮ, ບໍ່ແຮ, ການຂົນສົ່ງທາງລົດໄຟ, ທາງນ້ຳ ແລະ ທາງອາກາດ , ທະນາຄານ, ພາຫະນະສື່ສານ, ນິຄົມຂອງລັດ, ສະຖານີສອມແປງເຕັກນິກ, ອົງສາທະກິດການຄ້າ ແລະ ອົງສາທະກິດທີ່ດຳເນີນການເກັບຊື້ ທີ່ເປັນຂອງລັດ, ອົງສາທະກິດບໍລິການ ສາທາລະນະຊົນໃນຕົວເມືອງ ເຮືອນຊານຢູ່ໃນຕົວເມືອງ ແລະ ເຮືອນຢູ່ຂອງກຳມະກອນຢູ່ຊົນນະບົດ ກໍ່ຜະລິດຕະພັນທີ່ຜະລິດອອກມາຢູ່ ໃນອົງສາທະກິດຂອງລັດ.

ຢູ່ ສ.ສ.ສ.ຊ ກຳມະສິດຂອງສະຫະກອນ ແລະ ນາລວມແມ່ນຊັບສົມບັດ

ຂອງນາລວມຊຸ່ນ: ຄື່ອງຈັກກະສິດ (ລົດໄຖນາ, ລົດກັບກ່ຽວແລະອື່ນໆ) ຄະຫະສະຖານຮັບໃຊ້ວຽກຄື່ອນໄຫວສິດຖະກິດ, ສັດໃຫຍ່ປະພຄລາກແກ່-ແລະ ສັດໃຫຍ່ປະພຄລ້ຽງທີ່ເປັນຂອງສັງຄົມ, ວິສາຫະກິດສຳຮອງເພື່ອ ປຸງແຕ່ງວັດຖຸດິບກະສິກຳ, ໂຮງໄຟຟ້າຂອງນາລວມ, ຕາຫນ່າງອັນກວ້າງຂວາງ ຂອງສະຖານທີ່ຄື່ອນໄຫວວັດທະນະທຳໃນຊີວິດປະຈຳວັນ ກໍ່ຄືຜະລິດຕະພັນ ທີ່ຜະລິດອອກມາຢູ່ໃນນາລວມ ແລະ ວິສາຫະກິດແບບສະຫະກອນ ແຫ່ງອື່ນໆ. ຜ່ານການກໍ່ສ້າງສັງຄົມນິຍົມ ກຳມະສິດລວມຫມູ່ຂອງນາລວມ ແມ່ນມີການເພີ່ມທະວີຂຶ້ນ.

ຮູບການກຳມະສິດຂອງສະຫະກອນ ມີບໍ່ສະເພາະພຽງແຕ່ຢູ່ໃນການກະສິ-ກຳເທົ່ານັ້ນ. ຕົວຢ່າງຮູບການວິສາຫະກິດແບບສະຫະກອນຢູ່ໃນການຄ້າ ມີ ຢູ່ ສ.ສ.ສ.ຊ ພາຍໃຕ້ຮູບການເປັນສະມາຄົມຊົມໃຊ້ທີ່ເຕົ້າໂຮມກວມເອົາປະຊາ ຊົນຢູ່ຂຸດຊົນນະບົດເປັນຕົ້ນຕໍ.

ນີ້ແມ່ນສະຫະກອນປະພຄຕົ້ນຕໍຢູ່ ສ.ສ.ສ.ຊ. ສະຫະກອນປະພຄເຫຼົ່າ ນີ້ໄດ້ຮັບການແຜ່ຂະຫຍາຍອອກຢູ່ໃນປະທຄສັງຄົມນິຍົມອື່ນໆອີກ.

ອີງຕາມທາດແທ້ທາງດ້ານສັງຄົມ-ສຄຖະກິດຂອງມັນ ຮູບການກຳມະສິດ ຂອງລັດ ແລະ ຂອງສະຫະກອນ ແມ່ນເປັນປະພຄດຽວກັນ. ມັນເປັນ ປະ ພຄດຽວກັນ ຢູ່ບ່ອນໃດ ? ວິສາຫະກິດຂອງລັດ ແລະ ນາລວມ ກ່ອນອື່ນ - ຫມົດ ແມ່ນຕັ້ງຢູ່ບົນພື້ນຖານພາຫະນະການຜະລິດ ແບບລວມຫມູ່ ສັງຄົມນິຍົມ ແລະ ການອອກແຮງງານແບບລວມຫມູ່; ອັນທີສອງ ແມ່ນມັນ ລົບລ້າງການ ຂູດຮີດຄົນດ້ວຍຄົນນຳກັນ; ອັນທີສາມ ແມ່ນມັນດຳເນີນການຜະລິດຢ່າງມີແຜນ ການ ເພື່ອແນໃສ່ເພີ່ມທະວີລະດັບຄວາມຢູ່ດີກິນດີຂອງຊາວຜູ້ອອກແຮງງານໃຫ້ ສູງຂຶ້ນຢູ່ເລື້ອຍໆ; ອັນທີສີ່ ແມ່ນມັນປະຕິບັດຫລັກການສັງຄົມນິຍົມ ວ່າດ້ວຍ - ການແຈກຢາຍຕາມແຮງງານ.

ແຕ່ການທີ່ສອງຮູບການກຳມະສິດນີ້ ເປັນປະພຄດຽວກັນ ບໍ່ຫມາຍຄວາມ ວ່ານັນບໍ່ມີການແຕກຕ່າງຫຍັງຫມົດ ລະຫວ່າງສອງຮູບການອັນນີ້. ອັນ ແຕກ ຕ່າງ ກັນເປັນຕົ້ນຕໍລະຫວ່າງກຳມະສິດຂອງລັດແລະກຳມພສິດຂອງສະຫະກອນ ແມ່ນຢູ່ບ່ອນລະດັບການຫັນປ່ຽນພາຫະນະການຜະລິດມາເປັນຂອງສັງຄົມ ແບບ ສັງຄົມນິຍົມ. ຖ້າຫາກວ່າຢູ່ໃນວິສາຫະກິດຂອງລັດໄດ້ມີການຫັນປ່ຽນເອົາ ພາ

ຫະນະການຜະລິດທັງຫມົດມາເປັນຂອງສັງຄົມ ຢູ່ໃນຂອບເຂດຂອງທັງຫມົດສັງຄົມ (ຊັບສົມບັດ ຂອງທົ່ວປວງຊົນ) ແຕ່ຢູ່ໃນວິສາຫະກິດແບບສະຫະກອນ ນັ້ນພາຫະນະການຜະລິດແມ່ນເປັນກຳມະສິດ ຂອງຫມູ່ຄະນະໃດຫນຶ່ງ ສະເພາະ (ນາລວມ, ຫນ່ວຍແລກປ່ຽນແຮງງານ). ຜະລິດຕະພັນຂອງວິສາຫະກິດຂອງລັດ ເປັນກຳມະສິດຂອງປະຊາຊົນທັງຫມົດ. ຜະລິດຕະພັນຂອງນາລວມ ປະກອບເຂົ້າເປັນກຳມະສິດຂອງນາລວມແຫ່ງດັ່ງກ່າວ.

ລະດັບແຕກຕ່າງກັນໃນການຫັນປ່ຽນການຜະລິດໄປເປັນຂອງສັງຄົມພາໃຫ້ເກີດມີຮູບການແຕກຕ່າງກັນໃນການຈ່າຍຄ່າແຮງງານຂອງຊາວຜູ້ອອກແຮງ - ງານໃນການຜະລິດ ແລະ ມີຮູບການແຕກຕ່າງກັນໃນການຈັດຕັ້ງການຄຸ້ມຄອງການຜະລິດ. ຢູ່ວິສາຫະກິດຂອງລັດ ແມ່ນລັດສັງຄົມນິຍົມ ທີ່ເປັນຜູ້ດຳເນີນ - ການຄຸ້ມຄອງຜ່ານບຸກຄົນ ຜູ້ທີ່ໄດ້ຖືກມອບສິດເຊັ່ນ: ຜູ້ອຳນວຍການທີ່ແມ່ນ ອົງການຂອງລັດເປັນຜູ້ແຕ່ງຕັ້ງ ແລະ ຍົກຍ້າຍອອກຈາກຫນ້າທີ່. ຢູ່ໃນສະຫະ - ກອນແລະນາລວມຜູ້ທີ່ຊົ້ນຳຫມົດທຸກວຽກງານ ແມ່ນກອງປະຊຸມລວມ ແລະ ຄະນະບໍລິຫານອັນມີປະທານຄະນະບໍລິຫານເປັນຫົວຫນ້າ ຊຶ່ງແມ່ນກອງປະຊຸມລວມເປັນຜູ້ເລືອກຕັ້ງເອົາ.

ການຂະຫຍາຍຕົວຂອງກຳລັງການຜະລິດ ເຮັດໃຫ້ມີການເພີ່ມທະວີລະດັບການຫັນປ່ຽນການຜະລິດຢູ່ນາລວມໄປເປັນຂອງສັງຄົມ ແລະ ມີການຄ່ອຍໆຍົກເອົາຮູບການກຳມະສິດ ຂອງສະຫະກອນ-ນາລວມຂຶ້ນໄປເຖິງລະດັບຮູບ ການກຳມະສິດຂອງທົ່ວປວງຊົນ. ການກໍ່ສ້າງກອມມູນິດ ມີການຄືບຫນ້າໄປເທົ່າໃດການວິວັດດັ່ງກ່າວນີ້ກໍ່ຈະພາໄປເຖິງບ່ອນກຳມະສິດຂອງລັດ ແລະ ຂອງສະຫະກອນ- ນາລວມມີການລວມເຂົ້າກັນເປັນກຳມະສິດເອກະພາບອັນດຽວກັນແບບກອມມູນິດນິຍົມ່ຂອງທົ່ວປວງຊົນ.

ກຳມະສິດສ່ວນຕົວຂອງບຸກຄົນ ພາຍໃຕ້ລະບອບສັງຄົມນິຍົມ ກຳມະສິດ ລວມຫມູ່ ແມ່ນກວມເອົາພາຫະນະການ ຜະລິດ ແລະ ຜະລິດຕະພັນທີ່ເຮັດອອກມາໄດ້. ພາກສ່ວນຫນຶ່ງຂອງຜະລິດຕະ ພັນດັ່ງກ່າວຊຶ່ງ ປະກອບດ້ວຍເຄື່ອງໃຊ້ສອຍນັ້ນ ແມ່ນໄດ້ຮັບການແຈກຢາຍລະ ຫວ່າງຊາວຜູ້ອອກແຮງງານອີງຕາມຈຳນວນ ແລະ ຄຸນນະພາບຂອງການອອກ

ແຮງງານ ຂອງແຕ່ລະຄົນ ແລະ ມັນກໍ່ກາຍເປັນກຳມະສິດສ່ວນຕົວ ຂອງຊາວ ຜູ້ອອກແຮງງານ.

ພາຍໃຕ້ລະບອບສັງຄົມນິຍົມ ກຳມະສິດສ່ວນຕົວຂອງບຸກຄົນ ແມ່ນກຳມະ-ສິດຂອງບຸກຄົນໃດຫນຶ່ງສະເພາະຕໍ່ຜະລິດຕະພັນຈາກການອອກແຮງງານທີ່ເຮັດ ອອກມາເພື່ອໃຫ້ບຸກຄົນຊົມໃຊ້ທາງສ່ວນຕົວ. ຢູ່ ສ.ສ.ສ.ຊ ຈັດເຂົ້າເປັນກຳ ມະສິດສ່ວນຕົວຂອງບຸກຄົນ ມີລາຍໄດ້ຈາກການອອກແຮງງານ ແລະ ເງິນປະ ຍັດ, ພາກສ່ວນຫນຶ່ງຂອງເຮືອນຊານ, ເຄື່ອງໃຊ້ສອຍຢູ່ໃນເສດຖະກິດ ຄອບ ຄົວ ແລະ ຊີວິດການເປັນຢູ່, ເຄື່ອງໃຊ້ເພື່ອອຳນວຍຄວາມສະດວກທາງສ່ວນ ຕົວບຸກຄົນ.

ພາຍໃຕ້ລະບອບສັງຄົມນິຍົມ ເສດຖະກິດສຳຮອງຂອງສ່ວນຕົວ ຢູ່ໃນ ສະ ຫະກອນຊຶ່ງປະກອບມີເຮືອນຢູ່, ເຄຫະສະຖານທີ່ຮັບໃຊ້ການຜະລິດ, ສັດລ້ຽງ ປະເພດໃຫຍ່ ແລະເປັດໄກ່, ເຄື່ອງມືກະເສດຂະຫນາດນ້ອຍ ທີ່ຈຳເປັນເພື່ອ ດຳເນີນການປູກຝັງຢູ່ໃນສວນຄົວນັ້ນ ແມ່ນກຳມະສິດສ່ວນຕົວຂອງບຸກຄົນ ແບບ ຫນຶ່ງສະເພາະ. ມັນຕັ້ງຢູ່ບົນພື້ນຖານການອອກແຮງງານສ່ວນຕົວສະເພາະ - ຂອງສະມາຊິກນາລວມ ແລະ ຄົນຢູ່ໃນຄອບຄົວຂອງຜູ້ກ່ຽວ ແລະ ມັນກໍ່ມີ ລັກ ສະນະສຳຮອງ.

ຢູ່ໃນສັງຄົມ ສັງຄົມນິຍົມ ບໍ່ເກີດຂອງກຳມະສິດສ່ວນຕົວ ຂອງບຸກຄົນແມ່ນ ການອອກແຮງງານຢູ່ໃນການຜະລິດຂອງສັງຄົມ. ພາຍໃຕ້ລະບອບສັງຄົມນິຍົມ ການທີ່ກຳມະສິດລວມຫມູ່ແບບສັງຄົມນິຍົມ ກ່ຽວກັບພາຫະນະການຜະລິດ ໄດ້ ເປັນເຈົ້າຄອບຄອງນັ້ນ ເປັນການສ້າງພື້ນຖານອັນຫມັ້ນແກ່ນ ເພື່ອຕອບສະ - ຫນອງໃຫ້ໄດ້ຢ່າງເຕັມສ່ວນກວ່າເກົ່າ ຕໍ່ຄວາມຮຽກຮ້ອງຕ້ອງການທາງສ່ວນ-ຕົວຂອງຊາວຜູ້ອອກແຮງງານ ແລະ ເພື່ອເຮັດໃຫ້ກຳມະສິດສ່ວນຕົວຂອງພວກ ເຂົາເຈົ້າ ເຕີບໃຫຍ່ຂະຫຍາຍຕົວ. ສິ່ງດັ່ງກ່າວມານີ້ ແມ່ນຮັບປະກັນໃຫ້ມີຂຶ້ນ ໄດ້ ຍ້ອນການດຳເນີນຫລັກການວ່າດ້ວຍຜົນປະໂຫຍດສ່ວນຕົວ ທາງດ້ານວັດຖຸ ຢ່າງສະເຫມີຕົ້ນສະເຫມີປາຍ ໂດຍຜ່ານການຈ່າຍຄ່າແຮງງານຕາມຈຳນວນ-ແລະ ຄຸນນະພາບຂອງມັນ. ແຕ່ເຖິງຢ່າງໃດກໍ່ດີ ການເຕີບໃຫຍ່ຂະຫຍາຍຕົວ ຂອງກຳມະສິດສ່ວນຕົວຂອງບຸກຄົນ ບໍ່ແມ່ນຈະບໍ່ມີຂອບເຂດຈຳກັດ. ພາຍໃຕ້-ລະບອບສັງຄົມນິຍົມ ແມ່ນບໍ່ສາມາດຈະເອົາກຳມະສິດສ່ວນຕົວຂອງບຸກຄົນ ໄປ

ໃຊ້ໄດ້ສ້າງຄວາມເສຍຫາຍໃຫ້ແກ່ສິດຜົນປະໂຫຍດຂອງພົນລະເມືອງບາງ ຄົນ ເວົ້າສະເພາະ ແລະ ຂອງລັດເວົ້າລວມ.

ບັນດາກົດເກນທາງດ້ານເສດຖະກິດ ບັນດາກົດເກນທາງດ້ານເສດຖະກິດ ຂອງສັງຄົມນິຍົມ ໄດ້ມີການກຳເນີດ ໄດ້ເກີດຂຶ້ນມາ, ມີການຂະຫຍາຍຕົວ ແລະ ມີການເຄື່ອນໄຫວຢູ່ບົນພື້ນຖານຂອງ ກຳມະສິດລວມໝູ່ແບບສັງຄົມນິຍົມ ກ່ຽວກັບພາຫະນະການຜະລິດ: ນັ້ນກໍ່ຄືກົດ ເກນພື້ນຖານທາງດ້ານເສດຖະກິດຂອງສັງຄົມນິຍົມ, ກົດເກນແຫ່ງການ ຂະ ຫຍາຍຕົວຢ່າງມີແຜນການ ແລະ ຢ່າງສົມສ່ວນຂອງເສດຖະກິດແຫ່ງຊາດ,ກົດ ເກນແຈກຢາຍອີງຕາມແຮງງານ ແລະ ອື່ນໆ. ບັນດາກົດເກນທາງດ້ານເສດ ຖະກິດຂອງສັງຄົມນິຍົມ ແມ່ນສອງແສງເຖິງເນື້ອແທ້ຂອງການພົວພັນແຫ່ງການ ຜະລິດ ແບບສັງຄົມນິຍົມ ແລະ ກໍ່ມີລັກສະນະພາວະວິໄສ. ມັນມີການກຳເນີດ ຂຶ້ນ ແລະ ມີການເຄື່ອນໄຫວໂດຍບໍ່ຂຶ້ນກັບມານະຈິດ ແລະ ຄວາມພໍໃຈຂອງ-ຄົນ. ເຖິງແນວໃດກໍ່ດີ ເວົ້າແນວນັ້ນບໍ່ໝາຍຄວາມວ່າບັນດາກົດເກນທາງ - ດ້ານເສດຖະກິດ ແມ່ນມີການເຄື່ອນໄຫວແບບຕາມລຳພັງຂອງມັນເອງຄືກັນກັບ ບັນດາກົດເກນຂອງທຳມະຊາດ. ບັນດາກົດເກນທາງດ້ານເສດຖະກິດໃນ ຖາ ນະເປັນກົດເກນຂອງການພົວພັນແຫ່ງການຜະລິດ ແມ່ນບໍ່ສາມາດຈະເຄື່ອນ - ໄຫວຢູ່ນອກທີ່ບໍ່ມີຄົນ ແລະ ບໍ່ມີການຜະລິດຢູ່ໃນສັງຄົມຂອງພວກເຂົາເຈົ້າໄດ້. ລັກສະນະພາວະວິໄສຂອງບັນດາກົດເກນທາງດ້ານເສດຖະກິດຂອງສັງຄົມນິຍົມ ທີ່ເກີດມາຈາກການພົວພັນແຫ່ງການຜະລິດ ແບບສັງຄົມນິຍົມນັ້ນ ມັນໝາຍ - ເຖິງພຽງແຕ່ວ່າຄົນພົບບັນດາກົດເກນດັ່ງກ່າວນີ້, ພວກເຂົາເຈົ້າອີງໃສ່ ກົດ ເກນດັ່ງກ່າວ ເພື່ອເປັນພື້ນຖານໃນການເຄື່ອນໄຫວຂອງຕົນ ແລະ ພວກເຂົາ ເຈົ້າກໍ່ບໍ່ສາມາດຈະບໍ່ຄຳນຶງເຖິງການເຄື່ອນໄຫວຂອງບັນດາກົດເກນດັ່ງກ່າວນີ້ ໄດ້. ການບໍ່ເຂົ້າໃຈລັກສະນະພາວະວິໄສຂອງບັນດາກົດເກນທາງດ້ານ ເສດ ຖະກິດຂອງສັງຄົມນິຍົມ, ການບໍ່ຢາກຄຳນຶງເຖິງມັນ ລວມແຕ່ພາໄປເຖິງບ່ອນ ເກີດມີຜົນສະທ້ອນອັນບໍ່ດີຂຶ້ນ ແລະ ທັງເປັນການນຳເພການເຄື່ອນໄຫວ ປົກ ກະຕິທາງດ້ານເສດຖະກິດ.

ລັກສະນະການເຄື່ອນໄຫວຂອງ ບັນດາກົດເກນທາງດ້ານເສດຖະກິດຂອງ

ສັງຄົມນິຍົມ ແຕກຕ່າງກັນໂດຍພື້ນຖານກັບລັກສະນະການເຄື່ອນໄຫວ ຂອງ ບັນດາກົດເກນທາງດ້ານເສດຖະກິດຂອງທຶນນິຍົມ. ຂໍ້ແຕກຕ່າງກັນອັນນີ້ ແມ່ນ ຢູ່ບ່ອນວ່າ ບັນດາກົດເກນທາງດ້ານເສດຖະກິດຂອງສັງຄົມນິຍົມ ມີການເຄື່ອນ ໄຫວແບບບໍ່ແມ່ນຕາມມີຕາມເກີດຄືກັນກັບຢູ່ພາຍໃຕ້ລະບອບທຶນນິຍົມ ແຕ່ ມັນ ຫາກຖືກສັງຄົມຫມູນໃຊ້ຢ່າງມີສະຕິສຳນຶກ ແລະ ຢ່າງມີການຈັດຕັ້ງ. ຄືດັ່ງອັງ ແກນ ໄດ້ເວົ້າມານັ້ນ ບັນດາກົດເກນທາງດ້ານເສດຖະກິດຂອງທຶນນິຍົມ ແຕກ ຕ່າງກັນກັບບັນດາກົດເກນທາງດ້ານເສດຖະກິດຂອງສັງຄົມນິຍົມເທົ່າກັນກັບຟ້າ ຜ່າເຫລື້ອມອອກມາ ຈາກກ້ອນເມກແຕກຕ່າງກັນເທົ່າກັນກັບໄຟຟ້າ ທີ່ຢູ່ ພາຍ ໃຕ້ການບັນຊາຂອງຄົນ.

ເສດຖະກິດສັງຄົມນິຍົມ ຂະຫຍາຍ-ຕົວໄປຢ່າງເນື້ອງນິດລຽນຕົດ ແລະ ວ່ອງໄວ. ຂະຫນາດຂອງການ ຜະ ລິດນັບມື້ນັບເຕີບໃຫຍ່ຂະຫຍາຍຕົວ, ລະດັບເຕັກນິກ ແລະ ໂຄງປະກອບທາງ ດ້ານຂະແຫນງການຂອງການຜະລິດ ກໍ່ປ່ຽນແປງ ແລະ ເກີດມີ ສາຍສາໍພັນ ແລະ ການພົວພັນເສດຖະກິດແບບໃຫມ່ ທີ່ນັບມື້ນັບສັບສົນຂຶ້ນຕື່ມ. ບົນພື້ນຖານ ການນາໍໃຊ້ຜົນສາໍເລັດທາງດ້ານວິທະຍາສາດ-ເຕັກນິກຢ່າງເລັ່ງລັດ ເຂົ້າໃນ ຕົວຈິງນັ້ນ- ການຍົກສູງປະສິດທິພາບຂອງການຜະລິດຂຶ້ນໄດ້ມີຄວາມຫມາຍ ສາໍ ຄັນທີ່ມີລັກສະນະຕັດສິນຊີ້ຂາດ. ຍ້ອນແນວນີ້ ບັນຫາການສືບຕໍ່ປັບປຸງການ ຄຸ້ມ ຄອງໃຫ້ດີກວ່າເກົ່າ ແລະ ບັນຫາການປັບປຸງການວາງແຜນການກໍ່ສ້າງ ເສດ ຖະກິດແຫ່ງຊາດໃຫ້ກ້າວຫນ້າກວ່າເກົ່ານັ້ນ ຈິ່ງນັບມື້ນັບມີຄວາມສາໍຄັນ ແລະ ຂາດບໍ່ໄດ້.

ຢູ່ທີ່ກອງປະຊຸມໃຫຍ່ຄັ້ງທີ ๘๕ (ປີ ๑ຈນກຜ)ແລະຄັ້ງທີ ๘ຜ (ປີ ๑ຈຜຊ๑) ຂອງ ພ.ກ.ສ.ຊ ໄດ້ວາງບັນດາວິທີການຕົ້ນຕໍ ເພື່ອປັບປຸງການວາງ ແຜນ ການ ແລະ ການຄຸ້ມຄອງເສດຖະກິດແຫ່ງຊາດໃກ້ກ້າວຫນ້າກວ່າເກົ່າ.

ໂດຍອີງໃສ່ມະຕິຕົກລົງຂອງກອງປະຊຸມໃຫຍ່ ຂອງພັກໃນສອງຄັ້ງຄືດັ່ງໄດ້ ກ່າວມາແລ້ວນັ້ນ ໃນປີ ๑ຈນກຈ ສູນກາງ ພ.ກ.ສ.ຊ ແລະ ສະພາລັດຖະ-ມົນຕີແຫ່ງ ສ.ສ.ສ.ຊ ໄດ້ຮັບຮອງເອົາມະຕິຕົກລົງ "ວ່າດ້ວຍການປັບປຸງ - ການວາງແຜນການໃຫ້ດີກວ່າເກົ່າ ແລະ ການເພີ່ມທະວີຜົນກະທົບຂອງກົນໄກ ເສດຖະກິດ ຕໍ່ການຍົກສູງສະມັດຖະພາບ ຂອງການຜະລິດ ແລະ ຄຸນນະພາບ ຂອງວຽກງານ ". ມະຕິຕົກລົງດັ່ງກ່າວ ໄດ້ວາງຄາດຫມາຍໃຫ້ມີການປະຕິ-ບັດມາດຕະການຢ່າງເປັນລະບົບ ໂດຍແນໃສ່ສືບຕໍ່ດັດແກ້ການນາໍພາເສດຖະ-ກິດຂອງ ສ.ສ.ສ.ຊ ຢ່າງມີແຜນການໃຫ້ກ້າວຫນ້າກວ່າເກົ່າ, ເສີມຂະຫຍາຍ ຫລັກການປະຊາທິປະໄຕ ຢູ່ໃນການຄຸ້ມຄອງການຜະລິດ ແລະ ເພີ່ມທະວີ ຫົວ ຄິດລິເລີ່ມແບບປະດິດສ້າງຂອງຫນ່ວຍງານ.

ກົນໄກເສດຖະກິດຈະຕ້ອງອາໍນວຍຄວາມສະດວກໃຫ້ຫລາຍກວ່າເກົ່າ ອີກ ເພື່ອສາມາດເພີ່ມທະວີປະສິດທິພາບຂອງການຜະລິດ ແລະ ຄຸນນະພາບ ຂອງ ວຽກງານ, ໃຫ້ໄດ້ຮັບຫມາກຜົນສຸດທ້າຍອັນສູງສົ່ງ ທາງດ້ານເສດຖະກິດ ,

ຕອບສະໜອງໃຫ້ໄດ້ຢ່າງເຕັມສ່ວນກວ່າເກົ່າ ຄວາມຮຽກຮ້ອງຕ້ອງການ ອັນ
ທະວີຄູນຂຶ້ນ ຂອງປະຊາຊົນທາງດ້ານສ່ວນລວມ ແລະ ສ່ວນຕົວ. ບັນຫາການ
ຮັບປະກັນໃຫ້ມີການນຳໃຊ້ຢ່າງຖືກຕ້ອງ ເໝາະສົມໝົດທຸກສ່ວຍຢ່າງ ທີ່ມີຢູ່ໃນ
ເສດຖະກິດແຫ່ງຊາດຂອງ ສ.ສ.ສ.ຊ ໂດຍນຳໃຊ້ປັດໄຈແຫ່ງການເຕີບໃຫຍ
ຂະຫຍາຍຕົວແບບທະວີສົມເປັນຕົ້ນຕໍ, ແລະ ບັນຫາການນຳໃຊ້ຜົນສຳເລັດ -
ທາງດ້ານວິທະຍາສາດ-ເຕັກນິກ ແລະ ບົດຮຽນອັນນຳໜ້າເຂົ້າໃນການ ຜະ
ລິດຢ່າງກ້ວາງຂວາງກວ່າເກົ່າ ສອງບັນຫາດັ່ງກ່າວນີ້ ໄດ້ຖືກສັບຊ້ອນ ເຂົ້າ
ເປັນຈຸດໃຈກາງໃນການເຄື່ອນໄຫວຄຸ້ມຄອງ ແລະ ວາງແຜນການ.

ການປັບປຸງວຸຽກງານແຜນການໃຫ້ດີກວ່າເກົ່າ, ການເພີ່ມທະວີ ບົດບາດ
ຂອງແຜນການແຫ່ງລັດ ໃນຖານະເປັນເຄື່ອງມືຕົ້ນຕໍ ໃນການປະຕິບັດ ນະໂຍ
ບາຍເສດຖະກິດ ທັງໝົດເຫລົ່ານີ້ ແມ່ນມີຖານະບົດບາດອັນສຳຄັນຍິ່ງ ຢູ່ ໃນ
ທັງໝົດລະບົບມາດຕະການຄົບຊຸດ ທີ່ແນໃສ່ປັບປຸງກົນໄກເສດຖະກິດແລະວຽກ
ງານຄຸ້ມຄອງຢູ່ ສ.ສ.ສ.ຊ ໃຫ້ກ້າວໜ້າກວ່າເກົ່າ.

ລະບົບຕົວເລກຄາດໝາຍຢູ່ໃນແຜນການ ຈະຕ້ອງປຸກລະດົມໜ່ວຍງານ
ໃຫ້ຍົກສູງສະມັດຖະພາບຂອງການອອກແຮງງານ, ນຳໃຊ້ທຶນພັນຖານຢ່າງ ສຸດ
ຂີດ ປະຢັດຊັບພະຍາກອນທາງດ້ານວັດຖຢ່າງສຸດຂີດ. ມັນຈະຕ້ອງກະທົບຢ່າງ
ມີປະສິດທິຜົນກວ່າເກົ່າ ເຂົ້າໃສ່ການປະຕິບັດໜ້າທີ່ ທາງດ້ານເສດຖະກິດ -
ສັງຄົມ ແລະ ການພັດທະນາປະເທດຊາດ.

ມີການຄົ້ນຄວ້າວາງໂຄງການພັດທະນາ ຄວາມກ້າວໜ້າທາງດ້ານ ເຕັກ
ນິກຢ່າງຄົບຊຸດສຳລັບກຳນົດ ๔๐ ປີ (ໂດຍແບ່ງອອກເປັນໄລຍະຫ້າປີ). ໃນ
ເວລາຄົ້ນຄວ້າວາງແຜນການ ກຽວກັບການຂະຫຍາຍຕົວ ທາງດ້ານເສດຖະ-
ກິດ ແລະ ສັງຄົມຂອງປະເທດຊາດນັ້ນ ໄດ້ມີການຕັ້ງບັນຫາການຮັບປະກັນ -
ກອນອົ້ນໜົດ ກໍ່ແມ່ນ: ກ) ໃຫ້ມີການແກ້ໄຂບັນຫາຕ່າງໆ ທາງດ້ານເສດຖະ
ກິດ ແລະ ສັງຄົມແບບຄົບຊຸດ, ມີການເຕົ້າໂຮມກຳລັງ ແລະ ຊັບພະຍາກອນ
ເພື່ອຮັບໃຊ້ການປະຕິບັດໂຄງການລະດັບທົ່ວລັດໂດຍບໍ່ບ່ອຍປະໃຫ້ມີການ ເບ່ງ
ບັນຫາການຄົ້ນຄວ້າວາງແຜນການ ດ້ວຍສາຍຕາອັນແຄບໆຂອງຂະແໜງການ
ໃດໜຶ່ງ;

ຂ) ໃຫ້ມີການຮີບຮ້ອນໝູນໃຊ້ຢ່າງລັ່ງລັດ ໝາກຜົນການຄົ້ນຄ້ວາທາງດ້ານ

ວິທະຍາສາດ-ເຕັກນິກ ແນໃສ່ເພີ່ມທະວີຈັງຫວະ ໃນການເຕີບໃຫຍ່ຂະ ຫຍາຍຕົວ ສະມັດຖະພາບຂອງການອອກແຮງງານ ຂອງສັງຄົມ ແລະ ຄຸນນະ ພາບຂອງຜະລິດຕະພັນ;

ຄ) ໃຫ້ມີການນຳໃຊ້ ທຶນການຜະລິດ, ຊັບພະຍາກອນທາງດ້ານ ວັດຖຸ , ແຮງງານ ແລະ ການເງິນຢ່າງຖືກຕ້ອງເໝາະສົມ, ໃຫ້ມີການເພີ່ມທະວີລະ ບອບການປະຢັດ ແລະ ໃຫ້ມີການແກ້ໄຂບຸ້ໃຫ້ມີການຕົກຮ່ຽເສຍຫາຍຢູ່ ໃນ ເສດຖະກິດແຫ່ງຊາດ;

ງ) ໃຫ້ມີການກຳນົດຈຸດສຸມໃນການພັດທະນາ ຂະແໜງການ ແລະເຂດເສດ ຖະກິດຢ່າງຖືກຕ້ອງ ເພື່ອຮັບປະກັນການປ່ຽນແປງອັນກ້າວໜ້າ ຢູ່ໃນ ຂອບ ເຂດຂອງໜົດເສດຖະກິດແຫ່ງຊາດ ແລະ ເພື່ອຍົກສູງປະສິດທິພາບຂອງການ ລົງທຶນ ແລະ ຂອງການຜະລິດທັງໜົດຂອງສັງຄົມ;

ຈ) ໃຫ້ມີການສະສົມວັດຖຸ ແລະ ການເງິນທີ່ມີຄວາມຈຳເປັນ ເພື່ອຮັດ ໃຫ້ ເສດຖະກິດຂະຫຍາຍຕົວໄປຢ່າງສົມສ່ວນ ແລະ ມີການຄຸມຄ່ຽງ.

ເພື່ອຈຸດປະສົງຕີລາຄາການເຄື່ອນໄຫວຂອງໜ່ວຍງານ ຢູ່ໃນຂະແໜງ-ການສ່ວນຫລາຍ ໃຫ້ໄດ້ຢ່າງນອກຕົວກ່ວາເກົ່າ ໃນເວລາວາງແຜນການການ ຜະລິດ ແລະ ໃນເວລາກຳນົດສະມັດຖະພາບຂອງການອອກແຮງງານ ແລະ ຄົງເງິນເດືອນ ຕາມແຜນການນັ້ນ ຈຶ່ງໄດ້ມີການກຳນົດໃຊ້ຕົວເລກ ຄາດ ໝາຍ ກ່ຽວກັບຄຸນຄ່າທີ່ສ້າງຂຶ້ນໃໝ່.

ໃນເວລາຄົ້ນຄວ້າວາງແຜນການ ແລະ ຕີລາຄາການປະຕິບັດແຜນ ການ ເພີ່ນໄດ້ໃຫ້ຄວາມໝາຍສຳຄັນອັນດັບໜຶ່ງ ຕໍ່ບັນຫາການໄດ້ຮັບໝາກຜົນຢູ່ໃນ ເສດຖະກິດແຫ່ງຊາດ, ການຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງສັງ ຄົມ ດ້ວຍວິທີການນຳໃຊ້ ຊັບພະຍາກອນທັງໝົດຢ່າງຖືກຕ້ອງເໝາະສົມ.ສິ່ງ ດັ່ງກ່າວມານີ້ ມັນກໍ່ໄດ້ປະກົດຕົວອອກມາໃນການເປີດກວ້າງໃຫ້ຜູ້ຊົມໃຊ້ ສາ ມາດສົ່ງຜົນກະທົບໃສ່ການສ້າງແຜນການການຜະລິດ. ໃນໄລຍະເວລາ ແຫ ງ ການກະກຽມສ້າງແຜນການນັ້ນ ສະຫະພັນການຜະລິດ ແລະ ວິສາຫະກິດ ບົ ພັນຖານສາຍສຳພັນ ທາງດ້ານເສດຖະກິດ ໃນໄລຍະຍາວນານ ກັບຜູ້ຊົມ ໃຊ້ ແລະ ກັບຜູ້ຈັດສົ່ງໄດ້ກຳນົດລາຍການຜະລິດຕະພັນ ແລະ ເຊັນສັນຍາເສດຖະ ກິດນຳກັນ ສຳລັບໄລຍະຫ້າປີ. ການປະຕິບັດແຜນການຈັດສົ່ງຜະລິດຕະພັນໃຫ

ແກ້ຜູ້ຊົມໃຊ້ໂດຍສອດຄ່ອງກັບສັນຍາ ທີ່ໄດ້ເຊັນກັນມາແລ້ວນັ້ນ ກໍ່ໄດ້ກາຍ ມາ ເປັນຕົວເລກຄາດໝາຍອັນໜຶ່ງ ທີ່ສຳຄັນຍິ່ງ ເພື່ອຕີລາຄາໜ່ວຍງານ - ງານຂອງໜ່ວຍງານແລະເພື່ອສ້າງ ຄັງ ການສົ່ງເສີມທາງດ້ານວັດຖຸ, ການ ປະຕິບັດລະບົບມາດຕະການອັນກວ້າງຂວາງຢ່າງຄົບຊຸດ ແນໃສ່ປັບປຸງການ - ວາງແຜນການໃຫ້ດີຂຶ້ນກ່ວາເກົ່າ ແລະ ເພີ່ມທະວີການກະທົບຂອງກົນໄກເສດ ຖະກິດນັ້ນ ແມ່ນເລັ່ງໃສ່ຍົກສູງປະສິດທິພາບຂອງເສດຖະກິດໂຊວຽດ ຂຶ້ນຕື່ມ.

ຈຸດພິເສດໃນການວາງແຜນການ ການຜະລິດ ຂອງນາລອມ

ລັກສະນະສະເພາະຂອງນາລອມໃນ ຖານະເປັນວິສາຫະກິດແບບລອມໜູ ນັ້ນ ແມ່ນຢູ່ບ່ອນວ່າ ນາລອມ ດຳ ເນີນການເຄື່ອນໄຫວເສດຖະກິດບົນພື້ນຖານພາຫະນະການຜະລິດທີ່ເປັນກຳມະ ສິດທັງຂອງລັດ ກໍ່ຄືທັງຂອງລອມໜູຂອງນາລອມ.

ບັນດານາລອມ ບໍ່ແມ່ນດຳເນີນການຜະລິດຂອງຕົນ ແບບໂດດດ່ຽວ ໃຜ ລາວ ແຕ່ພວກເຂົາເຈົ້າ ແມ່ນໄດ້ຮັບການຊ່ວຍເຫລືອຢ່າງຮອບດ້ານ ແລະປະ ຈຳມື້ປະຈຳວັນຈາກລັດ. ລັດເປັນຜູ້ຂາຍລົດໄຖນາ, ລົດເກັບກ່ຽວແລະເຄື່ອງ ຈັກກະເສດອື່ນໆ, ຝຸ່ນວິທະຍາສາດ, ພະລັງໄຟຟ້າໃຫ້ບັນດານາລອມ, ລັດ ເປັນຜູ້ດຳເນີນການປ່ອແປງດິນດອນ, ເປັນຜູ້ກໍ່ສ້າງພະນັກງານວິຊາການແລະ ພະນັກງານບັນຊາເຄື່ອງຈັກກະເສດ, ເປັນຜູ້ຄ້ຳຊູ ທາງດ້ານການເງິນ ດ່ວຍ ການໃຫ້ເງິນສົມເຊື່ອ ໃນໄລຍະຍາວນານ ແລະ ອື່ນໆ. ທັງໝົດເຫລົ່ານີ້ ລວມແຕ່ແມ່ນພື້ນຖານທາງດ້ານເສດຖະກິດ ເພື່ອໃຫ້ລັດໄດ້ຊຸ້ມຳ ການຜະລິດ ຂອງນາລອມຢ່າງມີແຜນການ. ການທີ່ວ່ານັ້ນມີຄວາມຈຳເປັນ ທີ່ຈະຕ້ອງ ບັນ ທຶກເອົາບັນດານາລອມເຂົ້າຢູ່ໃນແຜນການກໍ່ສ້າງເສດຖະກິດແຫ່ງຊາດ ເອກະ ພາບອັນດຽວນັ້ນ ກໍ່ມາຈາກບ່ອນທີ່ວ່າ ພາກສ່ວນນາລອມ ເປັນບ່ອນທີ່ ຜະລິດ ພາກສ່ວນຫລວງຫລາຍຂອງສະບຽງອາຫານ ແລະ ວັດຖຸດິບ ຢູ່ໃນປະເທດ, ໝາຍຄວາມວ່າ ມັນແມ່ນພາກສ່ວນປະກອບແບບກາຍອິນຊີ ຂອງການຜະລິດ ສັງຄົມນິຍົມທັງໝົດ.

ຢູ່ໃນພາກການນຳພາ ທາງດ້ານແຜນການຕໍ່ນາລອມມັນມີຈຸດພິເສດ ບາງ ອັນ ທີ່ພົວພັນກັບລັກສະນະລອມໜູ ແບບສະຫະກອນຂອງວິສາຫະກິດດັ່ງກ່າວນີ້.

ໃນບັນດາຈຸດພິເສດດັ່ງກ່າວນີ້ ອັນສຳຄັນກວ່າໝູ່ ແມ່ນຢູ່ບ່ອນວ່າ ບັນດາ ນາ ລວມໄດ້ຖືກມອບໝາຍໃຫ້ມີຄວາມເປັນເອກະລາດໃນລະດັບສູງ ໃນບັນຫາ ການຈັດຕັ້ງການອອກແຮງງານ ແລະ ການຜະລິດແລະໃນການນຳໃຊ້ ຜະລິດ ຕະພັນທີ່ເຮັດໄດ້ມານັ້ນ.

ສຳລັບນາລວມແລ້ວ ບັນດາອົງການວາງແຜນການຂອງລັດຢູ່ ສ.ສ.ສ.ຮ ແມ່ນກຳນົດສະເພາະແຕ່ໜ້າທີ່ມອບໝາຍທາງດ້ານບໍລິມາດ ແລະ ລາຍການ ຂອງຜະລິດຕະພັນທີ່ລັດຈະຊື້ເອົານຳພວກເຂົາເຈົ້າເທົ່ານັ້ນ. ນອກຈາກນັ້ນ - ແລ້ວ ບັນຫາເລື່ອງໂຄງປະກອບເນື້ອທີ່ປູກຝັງ, ການຄັດເລືອກເຄື່ອງປູກຂອງ ຝັງ, ຈຳນວນສັດໃຫຍ່ ການເສີມຂະຫຍາຍຂະແໜງການ ສຳຮອງ, ການ ແບ່ງປັນລາຍໄດ້ລວມຍອດມາເຂົ້າເປັນຄັງເພື່ອຊົມໃຊ້ ແລະ ເພື່ອສະສົມ ແລະ ອື່ນໆແມ່ນນາລວມແຕ່ເປັນຜູ້ຂັ້ນແຜນການເອົາເອງ ໂດຍຄຳນຶງເຖິງຈຸດ ພິເສດຕ່າງໆກ່ຽວກັບເງື່ອນໄຂທາງດ້ານດິນຟ້າອາກາດ ແລະ ດ້ານເສດຖະ-ກິດຂອງຕົນ. ໃນນັ້ນມີຄວາມສຳຄັນທີ່ຈະຕ້ອງໄດ້ເວົ້າອອກມາວ່າ ຕົວເລກອັນ ແນ່ນອນຂອງໜ້າທີ່ມອບໝາຍຕາມແຜນການກ່ຽວກັບການຂາຍ ຜະລິດຕະພັນ ໃຫ້ລັດນັ້ນ ແມ່ນລວມແຕ່ມີການກຳນົດກັນເປັນຫລາຍປີລ່ວງໜ້າໄວ້ແລ້ວ ນີ້ ເປັນຂໍ້ສະດວກເຮັດໃຫ້ນາລວມມີເງື່ອນໄຂອັນຈຳເປັນ ເພື່ອວາງແຜນການສະ ເພາະໜ້າຂອງຕົນໄດ້. ຢູ່ໃນແຜນການຂອງລັດ ກ່ຽວກັບການຮັບຊື້ຜະລິດ-ຕະພັນຂອງນາລວມນັ້ນ ໄດ້ມີການຄາດຄະເນການສະໜອງ ໃຫ້ແກ່ນາລວມ ທາງດ້ານວັດຖຸ ແລະ ເຕັກນິກ ແລະ ກໍ່ມີການວາງກຳນົດລາຄາຮັບຊື້. ໃນ ກໍລະນີມີການຂາຍເຄື່ອງກະສິກຳເກີນລະດັບຄາດໝາຍ ຂອງແຜນການ ມັນກໍ່ ມີການເພີ່ມອັດຕາລາຄາຮັບຊື້. ມາດຕະການດັ່ງກ່າວນີ້ ແມ່ນແນໃສ່ໃຫ້ ໄປ ເຖິງບ່ອນມີການປະສານສົມທົບຢ່າງຖືກຕ້ອງ ລະຫວ່າງສິດຜົນປະໂຫຍດ ຂອງ ລັດ ກັບສິດຜົນປະໂຫຍດຂອງນາລວມ.

ມ. ບັນດາທ່າດີເລີດຂອງເສດຖະກິດແບບມີແຜນການ

ການດຳເນີນ ເສດຖະກິດ ແບບມີແຜນການ ແມ່ນໜຶ່ງໃນບັນດາທ່າ ດີ ເລີດອັນຕັດສິນຊະຂາດ ຂອງສັງຄົມນິຍົມ ເໜືອທຶນນິຍົມ. ທ່າດີເລີດອັນນີ້ ໄດ້

ຮັບການຢັ້ງຢືນໃນພາກຕົວຈິງດ້ວຍບັນດາຜົນສຳເລັດ ຜ່ານການຂະຫຍາຍ ຕົວ ຂອງເສດຖະກິດຢູ່ ສ.ສ.ສ.ຊ ແລະ ຢູ່ປະເທດສັງຄົມນິຍົມອື່ນໆ.

ທາດຖ້ເລີດຂອງການດຳເນີນເສດຖະກິດແບບມີແຜນການນັ້ນ ສະແດງ ຕົວ ອອກມາຢູ່ບ່ອນໃດແດ ?

ເສດຖະກິດສັງຄົມນິຍົມ ຂະຫຍາຍຕົວໄປໜ້າຢ່າງເມືອງມີຄຸນຄຸ່ນຕິດແບບ ຜັນເປັນກຽວຍົ້ນ ຢູ່ໃນເງື່ອນໄຂຂອງລະບອບທຶນນິຍົມ ຂ້ຶດແຍ່ງລະຫວ່າງລັກ ສະນະເປັນຂອງສັງຄົມແຫ່ງການຜະລິດ ກັບຮູບການທຶນນິຍົມ ເອກະເທດ ໃນ ການຍົດຖືໜາກຜົນແຫ່ງການຜະລິດນັ້ນ ໄດ້ເປັນສາຍເຫດພາໃຫ້ເກີດມີວິກິດ-. ການທາງດ້ານເສດຖະກິດຂຶ້ນຢູ່ໃນສັງຄົມ. ຢູ່ໃນເງື່ອນໄຂຂອງລະບອບສັງຄົມ ນິຍົມ ຂ້ຶດແຍ່ງດັ່ງກ່າວນີ້ໄດ້ຖືກລົບລ້າງໃຫ້ຕົກໄປ. ກຳມະສິດລວມໝູ່ ແບບ ສັງຄົມນິຍົມ ແມ່ນສອດຄ່ອງກັບລັກສະນະເປັນສັງຄົມຂອງການຜະລິດ ຍ້ອນ ແນວນີ້ ການຜະລິດສັງຄົມນິຍົມ ຈຶ່ງບໍ່ມີວິກິດການທາງດ້ານເສດຖະກິດ ຍ້ອນມີ ການຜະລິດຢ່າງລົ້ນເຫລືອ. ລັກສະນະສະເພາະຂອງເສດຖະກິດສັງຄົມນິຍົມ-ແບບມີແຜນການ ກໍ່ແມ່ນສະພາບຂອງອຸປະກອນທີ່ຮັດກຽບຢ່າງເຕັມ ແຮງໃນ ລະດັບສູງ ແລະ ການນຳໃຊ້ ທຶນພົນຖານຂອງວິສາຫະກິດ.

ເສດຖະກິດສັງຄົມນິຍົມ ແບບມີແຜນການແມ່ນປົດປ່ອຍບໍ່ໃຫ້ສັງຄົມ ແບກ ຫາບການສົ້ມເປື່ອງອັນມະຫາສານທາງດ້ານວັດຖຸ ແລະ ແຮງງານອັນເດັຍມີ-ມາສະເພາະສຳລັບທຶນນິຍົມ ຈຶ່ງພົ້ວພັນກັບວິກິດການທາງດ້ານເສດຖະກິດ,ລັກ ສະນະອະນາທິປະໄຕ ແລະ ການຈ້ວງຈ້ຶງກັນ, ໄພຫວ່າງງານ ແລະສະພາບ ວິສາຫະກິດຮັດກຽບຢ່າງບໍ່ເຕັມສ່ວນ ເປັນປະຈຳ ແລະ ອື່ນໆ.

ເສດຖະກິດແຫ່ງຊາດສັງຄົມນິຍົມ ຂະຫຍາຍຕົວໄປຢ່າງມີແຜນການເພື່ອ-ຮັບໃຊ້ໜົດທຸກຄົນຢູ່ໃນສັງຄົມໄດ້ມີຄວາມຢູ່ດີກິນດີຢ່າງເຕັມສ່ວນກວ່າເກົ່າ ທີ່ ຈະເຮັດໄດ້ ແລະ ເຮັດໃຫ້ແຕ່ລະຄົນໄດ້ມີການຂະຫຍາຍຕົວຢ່າງຮອບດ້ານ.

ການດຳເນີນເສດຖະກິດແບບມີແຜນການ ເປັນປັດໄຈອັນແຮງກ້າອັນໜຶ່ງ ຂອງຄວາມກ້າວໜ້າທາງດ້ານວິທະຍາສາດ-ເຕັກນິກ. ພາຍໃຕ້ລະບອບ ທຶນ ນິຍົມ ຄວາມພະຍາຍາມຂອງພວກກຸ່ມຜູກຂາດທີ່ຢາກປິດບັງບໍ່ໃຫ້ຜູ້ອື່ນຮູ້ຈັກກ່ຽວ ກັບຄວາມລັບທາງດ້ານເຕັກນິກ, ສະພາບວິສາຫະກິດຮັດວ່ຽກຢ່າງບໍ່ ເຕັມ ແຮງແບບເປັນປະຈຳ ລ້ວນແຕ່ເປັນການຈອງດ້ວງການນຳໃຊ້ຜົນສຳເລັດ ຂອງ

ການຄົ້ນຄິດທາງດ້ານວິທະຍາສາດ ແລະ ເຕັກນິກເຂົ້າໃນພາກຕົວຈິງ. ຢູ່ໃນ ສັງຄົມສັງຄົມນິຍົມ ວິທະຍາສາດ ແລະ ເຕັກນິກໄດ້ມີເງື່ອນໄຂຂະຫຍາຍ ຕົວ ຢ່າງເຕັມປ່ຽມ. ການດຳເນີນເສດຖະກິດແບບມີແຜນການ ເປີດໂອກາດໃຫ້ມີ ຄວາມສາມາດລວບລວມຊັບພະຍາກອນທາງດ້ານແຮງງານ, ວັດຖ ແລະການ ເງິນເພື່ອແກ້ໄຂຫນ້າທີ່ວຽກງານ ທາງດ້ານວິທະຍາສາດ-ເຕັກນິກ ອັນຮີບ - ດ່ວນອັນດັບຫນຶ່ງ.

ທ່າດີເລີດອັນສຳຄັນອັນຫນຶ່ງ ຂອງສັງຄົມນິຍົມ ທີ່ມີເຫນືອທຶນນິຍົມນັ້ນ ກໍ່ ແມ່ນການນຳໃຊ້ຊັບພະຍາກອນທາງດ້ານແຮງງານຢ່າງມີແຜນການ ຊຶ່ງ ເປັນ ການຮັບປະກັນໃຫ້ປະຊາຊົນພົນລະເມືອງຜູ້ອອກແຮງງານນັ້ນໄດ້ມີວຽກເຮັດ - ງານທຳຢ່າງເຕັມສ່ວນ. ພາຍໃຕ້ລະບອບສັງຄົມ ສັງຄົມນິຍົມແມ່ນບໍ່ມີໄພ - ຫວ່າງງານ, ຈຳນວນຄົນຜູ້ທີ່ເຮັດວຽກຢູ່ໃນເສດຖະກິດແຫ່ງຊາດ ກໍ່ມີ ການ ເພີ່ມທະວີຂຶ້ນຢ່າງບໍ່ຢຸດຢັ້ງ, ໄດ້ມີການກໍ່ສ້າງພະນັກງານຜູ້ມີຄວາມຊຳນິ ຊຳ ນານຢ່າງມີແຜນການ ແລະ ກໍ່ມີການສັບຊ້ອນພວກເຂົາເຈົ້າໄປຕາມຂະແຫນງ ການຕ່າງໆຂອງການຜະລິດ, ລະດັບຂອງຊາວຜູ້ອອກແຮງງານທາງດ້ານວັດຖ ແລະ ວັດທະນະທຳ ກໍ່ໄດ້ເພີ່ມຂຶ້ນຢ່າງເປັນລະບົບ.

ບັນດາທ່າດີເລີດຂອງການດຳເນີນ ເສດຖະກິດຢ່າງມີແຜນການນັ້ນ ກໍ່ຍັງ ໄດ້ສະແດງຕົວອອກຢູ່ໃນຈັງຫວະການຂະຫຍາຍຕົວ ຂອງເສດຖະກິດສັງຄົມນິ- ຍົມອີກ. ຢູ່ໃນບັນດາປະເທດສັງຄົມນິຍົມ ບໍລິມາດການຜະລິດອຸດສາຫະກຳ - ແມ່ນເພີ່ມຂຶ້ນຢູ່ເລື້ອຍໆໃນແຕ່ລະປີ.

ພວກນັກທິດສະດີທາງດ້ານແນວຄິດຂອງຊົນຊັ້ນນາຍທຶນ ແມ່ນພະຍາຍາມ- ຢັ້ງຢືນອອກມາກ່ຽວກັບຄວາມອາດສາມາດ ໃນການດຳເນີນເສດຖະກິດ ຢ່າງ ມີແຜນການໄດ້ຟາຍໃຕ້ລະບອບທຶນນິຍົມ. ພວກເຂົາເຈົ້າພະຍາຍາມແປງແຕ່ງ ໃຫ້ລະບອບທຶນນິຍົມສົດສວຍງົດງາມຂຶ້ນຕື່ມ ແລະ ສ້າງຄວາມເຂົ້າໃຈໃນ ຫມູ່ ຊາວຜູ້ອອກແຮງງານວ່າ ປະກົດວ່າມີຄວາມສາມາດຈະແກ້ໄຂຜົນຮ້າຍ ທາງ ດ້ານສັງຄົມ ຂອງທຶນນິຍົມ ໄດ້ໂດຍບໍ່ຕ້ອງໂຄ່ນລົ້ມມັນ. ແຕ່ໃນຕົວຈິງແລ້ວ ຂໍ້ ຂັດແຍ່ງຂອງເສດຖະກິດທຶນນິຍົມ, ລັກສະນະອະນາທິປະໄຕ ຢູ່ໃນການຜະລິດ ແລະ ວິກິດການ, ໄພຫວ່າງງານ ແລະ ສະພາບຂອງຜູ້ອອກແຮງງານ ຢູ່ໃນ ປະເທດທຶນນິຍົມທີ່ນັບມື້ນັບຊຸດໂຊມລົງຍ້ອນສາຍເຫດດັ່ງກ່າວມາຂ້າງເທິງນີ້ທັງ

ຫມົດເຫລົ່ານີ້ກໍ້ລ້ວນແຕ່ຕົໃສ່ການເສກສັນປັ້ນແຕ່ງເຫລົ່ານີ້ ໃຫ້ແຕກ ທະລາຍ-ຫມົດໄປ.

ຄຳຖາມເພື່ອທວນຄືນ

ຈ. ທາດແທ້ເນື້ອໃນຂອງກົດເກນວ່າດ້ວຍການຂະຫຍາຍຕົວ ຢ່າງມີແຜນການ ແລະຢ່າງສົມສ່ວນ ຂອງເສດຖະກິດແຫ່ງຊາດ ພາຍໃຕ້ລະບອບສັງຄົມນິ-ຍົມ. ດ້ວຍເຫດໃດມັນຈົ່ງມີຄວາມອາດສາມາດ ແລະ ທັງມີຄວາມ ຈຳ ເປັນທີ່ຈະຕ້ອງຂະຫຍາຍເສດຖະກິດແຫ່ງຊາດຢ່າງມີແຜນການ ພາຍ ໃຕ້ ລະບອບສັງຄົມນິຍົມ ?

ຄ. ຈົ່ງເວົ້າກ່ຽວກັບອັດຕາສ່ວນພື້ນຖານຢູ່ໃນເສດຖະກິດແຫ່ງຊາດ.

ຈ. ມີຫລັກການອັນໃດແດ່ ກ່ຽວກັບການຈັດວາງກຳລັງການຜະລິດພາຍໃຕ້ລະ ບອບສັງຄົມນິຍົມ ?

ຄ. ມີຫລັກການອັນໃດແດ່ກ່ຽວກັບການວາງແຜນການແບບ ສັງຄົມນິຍົມ ?

ຄ. ທາດແທ້ເນື້ອໃນຂອງວິທີການວາງແຜນການແບບດຸນດ່ຽງ.

ຜ. ມີມາດຕະການອັນໃດແດ່ ເພື່ອປັບປຸງການວາງແຜນການຢູ່ ສ.ສ.ສ.ຊ ໃຫ້ກ້າວຫນ້າກວ່າເກົ່າ ?

ກ. ຈຸດພິເສດໃນການວາງແຜນ່ການການຜະລິດຂອງພາກສ່ວນນາລວມ.

ຊ. ການດຳເນີນເສັດຖະກິດແບບມີແຜນການ ມີທ່າດີເລີດອັນໃດແດ່ ?

ข้ามจำหน่าย

ພາກ ສິບສອງ

ການອອກແຮງງານຂອງສັງຄົມ
ແລະສະມັດຖະພາບຂອງການອອກແຮງງານ

๑. ການອອກແຮງງານ ຂອງສັງຄົມ ພາຍໃຕ້ລະບອບ ສັງຄົມນິຍົມ

ລັກສະນະຂອງການອອກແຮງງານ ພາຍໃຕ້ລະບອບສັງຄົມນິຍົມ

ການອອກແຮງງານ, ການເຄື່ອນໄຫວອອກແຮງງານຂອງຄົນ ທີ່ແນໃສ່ຜະລິດຊັບສົມທາງດ້ານວັດຖຸນັ້ນ ແມ່ນເງື່ອນໄຂອັນຈຳເປັນ ສຳລັບການດຳລົງຄົງຕົວ ຂອງສັງຄົມ. ແຕ່ລັກສະນະຂອງການອອກແຮງງານ ບໍ່ຄ້າຍຄືກັນ ຢູ່ໃນລະບອບສັງຄົມ-ເສດຖະກິດອັນແຕກຕ່າງກັນ. ມັນຂຶ້ນ ໂດຍກົງຢ່າງຂາດຂັ້ນກັບການພົວພັນແຫ່ງການ-ຜະລິດ ທີ່ເປັນເຈົ້າຄອບຄອງຢູ່ໃນສັງຄົມ. ການອອກແຮງງານຈະເປັນໄປ - ແບບສະໝັກໃຈເຮັດ, ແບບອອກແຮງງານຢ່າງມີອົດສະຫລະເສລີ ເພື່ອ ຮັບໃຊ້ຕົນເອງ ແລະ ຮັບໃຊ້ສັງຄົມຂອງຕົນ ຫລືຫາກຈະເປັນໄປແບບບໍ່ມີອົດສະ-ຫລະພາບ, ແບບບັງຄັບໃຫ້ໄປອອກແຮງງານຮັບໃຊ້ພວກຊຸດຮີດນັ້ນ-ມັນກໍ່ລ້ວນ ແຕ່ຂຶ້ນກັບບ່ອນທີ່ວ່າ ພາຫະນະການຜະລິດນັ້ນແມ່ນເປັນຂອງໃຜ ?

ຢູ່ໃນທຸກໆລະບອບທີ່ມີການກົດຂີ່ຊຸດຮີດນັ້ນ ກໍ່ມີການໃຊ້ວິທີການຕ່າງໆເພື່ອ ບີບບັງຄັບໃຫ້ຊາວຜູ້ອອກແຮງງານສ້າງຮັ່ງຄູ່ມືໃຫ້ແກ່ພວກຊຸດຮີດ. ສິ່ງດັ່ງ - ກ່າວມານີ້ ໄດ້ຂຶ້ນກ່ຽວກັບຜູ້ທີ່ດຳເນີນການຜະລິດໂດຍກົງນັ້ນ ແມ່ນບໍ່ມີ ພາ

ຫະນະການຜະລິດ. ດ້ວຍເຫດນີ້ ກຳມະສິດສ່ວນຕົວ ກ່ຽວກັບພາຫະນະ ການ ຜະລິດ ແມ່ນສາຍເຫດພື້ນຖານ ຂອງການອອກແຮງງານ ທີ່ມີລັກສະນະແບບບໍ່ມີອິດສະຫລະເສລີ ແລະ ເປັນຫຍັງການອອກແຮງງານ ຈົ່ງກາຍມາເປັນແອກ ຫນີບເຕັງອັນຫນັກຫນ່ວງ. ເມື່ອຢາກລົບລ້າງໃຫ້ໄດ້ຢ່າງສົ້ນເຊີງ ລັກສະນະບໍ່ມີອິດສະຫລະເສລີ ຂອງການອອກແຮງງານນັ້ນ ມີຄວາມຈຳເປັນທີ່ຈະຕ້ອງດັບ ສູນກຳມະສິດສ່ວນຕົວ ກ່ຽວກັບພາຫະນະການຜະລິດ.

ຢູ່ໃນສັງຄົມ ສັງຄົມນິຍົມ ແມ່ນມີສະພາບແຕກຕ່າງກັນ. ຢູ່ໃນສັງຄົມອັນນີ້ ຫມົດທຸກຄົນ ແມ່ນອອກແຮງງານຮັບໃຊ້ຕົນເອງ, ຮັບໃຊ້ສັງຄົມຂອງຕົນ. ຜົນ ສຳເລັດແຕ່ລະອັນ ໃນການຜະລິດ, ຜົນສຳເລັດໃນການອອກແຮງງານແຕ່ລະ ອັນ ລ້ວນແຕ່ມີຜົນສະທ້ອນແບບໂດຍກົງ ຫລື ທາງອ້ອມ ເພື່ອເຮັດໃຫ້ສະພາບ ຊີວິດການເປັນຢູ່ຂອງຊາວຜູ້ອອກແຮງງານ ທາງດ້ານວັດຖ ແລະ ວັດທະນະ-ທຳດີຂຶ້ນຢູ່ເລື້ອຍໆ.

ເມື່ອເວົ້າເຖິງການອອກແຮງງານ ຢູ່ໃນລະບອບສັງຄົມນິຍົມແລ້ວ ວ.ອີ. ເລນິນ ໄດ້ບົ່ງຊີ້ອອກມາວ່າ "ພາຍຫລັງທີ່ໄດ້ອອກແຮງງານຮັບໃຊ້ຜູ້ອື່ນ, ໄດ້ ເຮັດວຽກງານແບບບໍ່ມີອິດສະຫລະເສລີ ຮັບໃຊ້ພວກຂູດຮີດໄດ້ຫລາຍຮ້ອຍປີມາ ແລ້ວນັ້ນ ນັບເປັນຄັ້ງທຳອິດທີ່ໄດ້ເກີດມີຄວາມອາດສາມາດ <u>ເຮັດວຽກງານຮັບ ໃຊ້ຕົນເອງ</u> ໂດຍສະເພາະກໍ່ແມ່ນເຮັດວຽກງານທີ່ອີງໃສ່ຫມາກຜົນທັງຫມົດ - ຂອງເຕັກນິກອັນຫລ້າສຸດ ແລະ ຂອງວັດທະນະທຳ " ๑).

ສັງຄົມນິຍົມ ພາໃຫ້ເກີດມີບາດລ້ຽວຢ່າງເຖິງຖອງຢູ່ໃນສາຍຕາຂອງຄົນທີ່ ເບົ່ງການອອກແຮງງານ, ແລະ ມັນກໍ່ພາໃຫ້ເກີດມີການວາງທ່າທີແບບໃຫມ່ຕໍ່ ການອອກແຮງງານ. ຖັນແຖວນັກດັດແປງ ແລະ ນັກປະດິດຄິດແຕ່ງ ກໍ່ໄດ້ - ເພີ່ມຂຶ້ນຢ່າງເປັນປະຈຳ. ເປັນຕົ້ນຢູ່ ສ.ສ.ສ.ຊ ໃນປີ ๑ຈຊ๐ ໄດ້ມີການ-ປະກອບຄຳຄິດຄຳເຫັນເພື່ອດັດແປງການຜະລິດຫລາຍກວ່າ ๕ ລ້ານອັນ ຊຶ່ງ ໃນຈຳນວນນັ້ນ ຄຳສະເຫນີຫລາຍກວ່າ ๔ ລ້ານອັນກໍ່ໄດ້ຖືກນຳໃຊ້ເຂົ້າ ໃນ ເສດຖະກິດແຫ່ງຊາດ. ອັນນີ້ໄດ້ເຮັດໃຫ້ມີການປະຢັດໄດ້ຫລາຍກວ່າ ຜ,ນ ຕື້ ລຸບ ຖ້ານາຄິດໄລ່ໃສ່ປີຫນຶ່ງ. ລັດສັງຄົມນິຍົມແມ່ນສົ່ງເສີມໃຫ້ມີຫົວຄິດ ປະດິດ

---

๑) ວ.ອີ.ເລນິນ. ນິພົນຄົບຊຸດ, ເຫລັ້ມ ນ້ຕ, ຫນ້າ ๑ຈຜ.

ສ້າງ, ມີການວາງທ່າທີແບບປະດິດສ້າງຕໍ່ການອອກແຮງງານ ດ້ວຍຫມົດທຸກວິ ຖີທາງບໍ່ວ່າທາງດ້ານວັດຖຸ ກໍ່ຄືທາງດ້ານແນວຄິດຈິດໃຈ. ຢູ່ໃນປະເທດສັງຄົມ ນິຍົມ ພົນລະເມືອງຜູ້ມີກຽດສັກສີກວ່າຫມູ່ ກໍ່ແມ່ນຜູ້ທີ່ນຳເອົາອັນໃຫມ່ ທີ່ ກ້າວ ຫນ້າກວ່າເກົ່າ ເຂົ້າມາຫມູນໃຊ້, ຜູ້ທີ່ເສີມຂະຫຍາຍການຜະລິດ ແລະ ເຮັດ ໃຫ້ປະເທດຊາດທະວີຄູນຄວາມຮັ່ງ ຄວາມມີຂັ້ນຕົ່ມ.

ສັງຄົມນິຍົມ ໄດ້ສ້າງໃຫ້ມີຄວາມອາດສາມາດຢ່າງກວ້າງຂວາງ ເປັນຄັ້ງ ທຳອິດເພື່ອເພີ່ມລະດັບການປະກອບເຕັກນິກເຂົ້າໃນການອອກແຮງງານ ຢູ່ໃນ ຫມົດທຸກຂະແຫນງການການຜະລິດຂອງສັງຄົມຢ່າງວ່ອງໄວ. ການເພີ່ມທະວີ-ລະດັບການປະກອບເຕັກນິກເຂົ້າໃນການອອກແຮງງານຢູ່ໃນລະບອບສັງຄົມ ນິ ຍົມນັ້ນ ມັນປະກົດຕົວອອກຢູ່ໃນການນຳໃຊ້ເຕັກນິກອັນທັນສະໄຫມ ນັບມື້ນັບ - ຫລາຍຂັ້ນ ແລະ ໃນການເພີ່ມທະວີການປະກອບພະລັງງານເຂົ້າໃນການອອກ ແຮງງານ. ອັນນີ້ເຮັດໃຫ້ການອອກແຮງງານຂອງກຳມະກອນ ເບົາບາງລົງ ແລະ ມີການຫັນປ່ຽນໄປເປັນການອອກແຮງງານ ທີ່ມີລະດັບສູງທາງດ້ານ - ຄວາມຊຳນິຊຳນານ ແລະ ກໍ່ພາໄປເຖິງບ່ອນຄ່ອຍໆມີການລົບລ້າງຄວາມແຕກ ຕ່າງກັນ ລະຫວ່າງການອອກແຮງງານດ້ວຍມັນສະຫມອງ ກັບການອອກ ແຮງ ງານດ້ວຍຮ່າງກາຍ.

ການຜະລິດສັງຄົມນິຍົມ ທີ່ຕັ້ງຢູ່ບົນພື້ນຖານເຕັກນິກອັນຫລ້າສຸດນັ້ນ ຮຽກ ຮ້ອງໃຫ້ມີຄົນທີ່ມີລະດັບທາງດ້ານເຕັກນິກ ແລະ ມີຄວາມຮູ້ທາງດ້ານນີ້. ຢູ່ໃນ ສັງຄົມ ສັງຄົມນິຍົມ ຊາວຜູ້ອອກແຮງງານແຕ່ລະຄົນ ມີຄວາມອາດສາມາດອັນ ກວ້າງຂວາງທີ່ສຸດ ເພື່ອຍົກສູງລະດັບຄວາມຊຳນິຊຳນານ ແລະ ລະດັບວັດທະ ນະທຳຂອງຕົນຂັ້ນ. ຮູບການສຶກສາຮຳຮຽນອັນເປັນພື້ນຖານທັງຫມົດ ກໍ່ລ້ວນ-ແຕ່ແມ່ນບໍ່ໄດ້ເສຍເງິນຢູ່ ສ.ສ.ສ.ຊ ນັ້ນກໍ່ຄືຮູບການສຶກສາຂັ້ນອຸດົມ, ຂັ້ນ ວິ ຊາຊີບຊັ້ນກາງ, ຂັ້ນສູງ, ຮູບການສຶກສາຢູ່ໃນໂຮງຮຽນເຕັກນິກຊັ້ນຕົ້ນ,ຢູ່ໃນ ລະບົບບຳລຸງເພື່ອຍົກລະດັບຄວາມຊຳນິຊຳນານ, ຢູ່ໃນລະບົບນັກຄົ້ນຄວ້າແລະ ຢູ່ໃນລະບົບໂຮງຮຽນບຳລຸງວິຊາການແພດ.

ສັງຄົມນິຍົມ ແມ່ນສ້າງໃຫ້ມີເງື່ອນໄຂໃນການອອກແຮງງານ ໂດຍບໍ່ໃຫ້ມີ ຜົນສະທ້ອນແນວບໍ່ດີຕໍ່ສຸຂະພາບຂອງພວກກຳມະກອນເທົ່າທີ່ຈະເປັນໄປໄດ້.ວ. ອີ.ເລນິນ ໄດ້ເຄີຍເວົ້າເປັນຫລາຍໆຄັ້ງມາແລ້ວວ່າ ພາຍໃຕ້ລະບອບສັງຄົມນິ

ຍົມ ຜົນສຳເລັດທາງດ້ານວິທະຍາສາດ ແລະ ເຕັກນິກ ອັນໃດກໍ່ຕາມ ມັນ ກໍ່ແມ່ນແມ່ໃສ່ເຮັດໃຫ້ການອອກແຮງງານເບົາບາງລົງ, ເຮັດໃຫ້ວັນງານ ສັ້ນເຂົ້າ ແລະ ເຮັດໃຫ້ເງື່ອນໄຂໃນການອອກແຮງງານດີຂຶ້ນກວ່າເກົ່າ.

ລະບອບສັງຄົມນິຍົມ ແມ່ນຮັບປະກັນໃຫ້ແຕ່ລະຄົນມີສິດໃນການອອກແຮງ-ງານ. ຫລັກການອັນນີ້ ໄດ້ຖືກບັນທຶກເຂົ້າໃນກົດລັດຖະທຳມະນູນຂອງບັນ ດາ ປະເທດສັງຄົມນິຍົມ. ການປະຕິບັດສິດໃນການອອກແຮງງານ ໝາຍຄວາມ-ວ່າ ສິດຂອງຊາວຜູ້ອອກແຮງງານແຕ່ລະຄົນ ໃນການໄດ້ຮັບວຽກເຮັດງານທຳ ຢູ່ໃນປະເທດຂອງຕົນ ຕາມວິຊາສະເພາະຂອງຕົນ ແລະ ໃນການໄດ້ຮັບ ຄ່າ ຈ້າຍຕາມແຮງງານນັ້ນ ແມ່ນຜົນສຳເລັດອັນຍິ່ງໃຫຍ່ ຂອງສັງຄົມນິຍົມ. ສິດທິ ອັນນີ້ໄດ້ມີການຮັບປະກັນໃນຕົວຈິງດ້ວຍການຂະຫຍາຍຕົວຢ່າງມີແຜນການຂອງ ເສດຖະກິດແຫ່ງຊາດ ແລະ ດ້ວຍການເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ - ຂອງການຜະລິດ. ພາຍໃຕ້ລະບອບສັງຄົມນິຍົມ ພວກກຳມະກອນແມ່ນບໍ່ ຢ້ານ ເລີຍວ່າ ຈະບໍ່ມີພາຫະນະເພື່ອໃຫ້ມີຊີວິດຢູ່ໄປໄດ້. ການລົບລ້າງບໍ່ໃຫ້ມີ ໄພ ຫວ່າງງານໃນໝົດທຸກຮູບການຂອງມັນນັ້ນ ໄດ້ເຮັດໃຫ້ຊາວຜູ້ອອກແຮງງານມີ ຄວາມເຊື່ອໝັ້ນຢ່າງຕາຍໃຈ ຕໍ່ອະນາຄົດຂອງຕົນ ພາຍໃຕ້ລະບອບສັງຄົມນິ-ຍົມ.

ຢູ່ໃນເງື່ອນໄຂຂອງສັງຄົມນິຍົມ ມີການຮັບປະກັນໃຫ້ ພົນລະເມືອງໝົດ ທຸກຄົນມີສິດໃນການອອກແຮງງານ ແລະ ໃນເວລາດຽວກັນນັ້ນ ຢູ່ໃນ ລັດຖະ ທຳມະນູນ ກໍ່ໄດ້ບົ່ງໄວ້ວ່າ ພວກເຂົາເຈົ້າຈະຕ້ອງເຂົ້າຮ່ວມອອກແຮງ ງານ ຢ່າງຂາດບໍ່ໄດ້ ຢູ່ໃນການຜະລິດສັງຄົມນິຍົມ. ການເຂົ້າຮ່ວມໃນການ ອອກ ແຮງງານຂອງສັງຄົມ ແມ່ນໜ້າທີ່ອັນມີກຽດສະຫງ່າ ຂອງພົນລະເມືອງແຕ່ລະ ຄົນ ຢູ່ໃນສັງຄົມ ສັງຄົມນິຍົມ ໂດຍບໍ່ມີການຈຳແນກເຊື້ອສາຍບ່ອນກຳເນີດ , ເພດໄວ ແລະ ສັນຊາດ.

ຈຸດພິເສດອັນໜຶ່ງ ທີ່ສຳຄັນຂອງການອອກແຮງງານ ພາຍໃຕ້ລະບອບສັງ ຄົມນິຍົມ ກໍ່ແມ່ນລັກສະນະເປັນຂອງສັງຄົມໂດຍກົງຂອງມັນ. ການອອກແຮງ-ງານສັງຄົມນິຍົມ ແມ່ນການອອກແຮງງານທີ່ມີການຈັດຕັ້ງຢ່າງມີແຜນການແລະ ມີການວາງມາດຕະຖານຢູ່ໃນຂອບເຂດຂອງໜົດທົ່ວລັດ. ຢູ່ໃນເງື່ອນໄຂຂອງ ສັງຄົມນິຍົມ ການແບ່ງງານຢູ່ໃນສັງຄົມ ແມ່ນແຕກຕ່າງກັນໂດຍພື້ນຖານ ກັບ

ການແບ່ງງານຢູ່ໃນລະບອບທຶນນິຍົມ. ຂໍ້ດໝາຍອັນສຳຄັນຍິ່ງ ຂອງການແບ່ງ ງານແບບສັງຄົມນິຍົມ ກໍ່ຢູ່ບ່ອນທີ່ມັນມີການປະຕິບັດໄປຢ່າງມີແຜນການ. ສັງ ຄົມນິຍົມລົບລ້າງບໍ່ໃຫ້ມີສ່າຫະກິດເສດຖະກິດມີລັກສະນະຜະລິດແບບກະແຈກກະ ຈາຍ ແລະ ແບ່ງເອກະເທດໃຜລາວ ແລະ ມັນກໍ່ໄດ້ເຕົ້າໂຮມເອົາບັນດາ ມີ ສາຫະກິດດັ່ງກ່າວນີ້ມາເຂົ້າເປັນໂຄງຮ່າງເສດຖະກິດເອກະພາບອັນດຽວແລະ ເຕົ້າໂຮມເອົາຄົນມາເຂົ້າເປັນໝູ່ຄະນະເອກະພາບອັນດຽວ. ຍ້ອນແນວ ນັ້ ການອອກແຮງງານຂອງກຳມະກອນ, ຊາວນາ ແລະ ຜູ້ທີ່ອອກແຮງງານທາງ ດ້ານມັນສະໝອງແຕ່ລະຄົນຈຶ່ງແມ່ນພາກສ່ວນໜຶ່ງ ຂອງການອອກແຮງ ງານ ຂອງສັງຄົມທັງໝົດ ແລະ ມັນຈຶ່ງມີລັກສະນະເປັນຂອງສັງຄົມໂດຍກົງ.

ສະຫລຸບຄວາມແລ້ວ ບັນດາຈຸດພິເສດອັນສຳຄັນຍິ່ງຂອງການອອກແຮງ - ງານພາຍໃຕ້ລະບອບສັງຄົມນິຍົມ ກໍ່ແມ່ນບັນຫາເລື່ອງການປົດປ່ອຍຊາວຜູ້ອອກ ແຮງງານ ອອກຈາກການກົດຂີ່ຂູດຮີດ ແລະ ການຫັນປ່ຽນການອອກແຮງງານ ຈາກບ່ອນບໍ່ມີອົດສະຫລະເສລີ ມາເປັນການອອກແຮງງານແບບມີອົດສະຫລະ- ເສລີ ເພື່ອຮັບໃຊ້ຕົນເອງ; ສິດສະເໝີພາບຂອງຊາວຜູ້ອອກແຮງງານ ທັງ ໝົດໃນການອອກແຮງງານ ແລະ ໜ້າທີ່ທົ່ວໄປ ຕໍ່ການອອກແຮງງານ, ລັກ ສະນະເປັນຂອງສັງຄົມໂດຍກົງຂອງການອອກແຮງງານ, ການວາງທ່າທີແບບ ມີຄວາມຕື່ນຕົວ ແລະ ມີຫົວຄິດປະດິດສ້າງຕໍ່ການອອກແຮງງານ.

ການສຳພັນການອອກແຮງງານ ແບບສັງຄົມນິຍົມ

ການເກີດມີຄວາມແຕກຕ່າງກັນໂດຍ- ພື້ນຖານ ໃນລັກສະນະຂອງການອອກ ແຮງງານຂອງສັງຄົມຢູ່ໃນລະບອບສັງ ຄົມນິຍົມ ໄດ້ພາໃຫ້ມີການປ່ຽນແປງໂດຍພື້ນຖານ ໃນຮູບການ ແລະ ວິທີການ ຈັດຕັ້ງການອອກແຮງງານ. ການອອກແຮງງານແບບສັງຄົມນິຍົມ ແມ່ນ ການ ອອກແຮງງານແບບລວມໝູ່, ມັນແມ່ນການເຄື່ອນໄຫວສົມທົບຮ່ວມກັນ ລະ ຫວ່າງພວກກຳມະກອນ, ຊາວນາ ແລະ ປັນຍາຊົນ.

ຈະແມ່ນຢູ່ໃນສັງຄົມໃດກໍ່ຕາມ ການຜະລິດແມ່ນດຳເນີນໄປບົນພື້ນ ຖານ ການສຳພັນການອອກແຮງງານ ຈຶ່ງແມ່ນການອອກແຮງງານສົມທົບຮ່ວມ ກັນ ຂອງຄົນພາຍໃຕ້ຮູບການນີ້ ຫລືຮູບການນັ້ນ. ການສຳພັນການອອກແຮງ ງານ

ແບບສັງຄົມນິຍົມ ແມ່ນການອອກແຮງງານແບບສົມທົບຮ່ວມກັນ ແລະ ແບບ ມີ ການຈັດຕັ້ງຢ່າງມີແຜນການ ທີ່ຕັ້ງຢູ່ບົນພື້ນຖານການຮ່ວມມື ຖານເພື່ອນ ສະ ຫາຍນຳກັນ ລະຫວ່າງຊາວຜູ້ອອກແຮງງານ ທີ່ໄດ້ຮັບການປົດປ່ອຍອອກຈາກ-ການກົດຂີ່ຂູດຮີດ. ການສຳພັນການອອກແຮງງານ ແບບສັງຄົມນິຍົມແມ່ນແຕກ ຕ່າງກັນທາງດ້ານຫລັກການກັບການສຳພັນ ການອອກແຮງງານ ພາຍໃຕ້ ລະ ບອບທຶນນິຍົມ. ພາຍໃຕ້ລະບອບທຶນນິຍົມມັນແມ່ນກຳມະສິດສ່ວນຕົວ ກ່ຽວ ກັບ ພາຫະນະການຜະລິດ ທີ່ເປັນພື້ນຖານຂອງການສຳພັນ ການອອກແຮງງານອັນ ນັ້ນໄດ້ພາໃຫ້ມີການຂູດຮີດຄົນ. ມັນແມ່ນພວກຈຸ້ມຊັ້ນຂູດຮີດພຸ້ນ ທີ່ເປັນຜູ້ໄດ້ຮັບ ຜົນທັ່ງຫມົດ ຈາກການສຳພັນການອອກແຮງງານແບບນັ້ນ.

ພາຍໃຕ້ລະບອບສັງຄົມນິຍົມ ແມ່ນກຳມະສິດສ່ວນລວມ ແບບ ສັງຄົມນິຍົມ ກ່ຽວກັບພາຫະນະການຜະລິດທີ່ເປັນພື້ນຖານຂອງການສຳພັນການອອກແຮງ - ງານ. ຍ້ອນແນວນັ້ນ ຢູ່ບ່ອນນັ້ນ ຈຶ່ງບໍ່ມີຄົນຂູດຮີດຄົນ. ການສຳພັນການອອກແຮງ ງານແບບສັງຄົມນິຍົມ ແມ່ນກວມເອົາບໍ່ສະເພາະພຽງແຕ່ການອອກແຮງ ງານ ຂອງຊາວຜູ້ອອກແຮງງານ ທີ່ເຮັດວຽກຢູ່ໃນວິສາຫະກິດອັນດຽວກັນເທົ່ານັ້ນແຕ່ ມັນຍັງກວມເອົາທັງການອອກແຮງງານຂອງຫມົດທຸກຄົນຢູ່ໃນສັງຄົມອີກ. ພາຍ ໃຕ້ລະບອບສັງຄົມນິຍົມ ການອອກແຮງງານ ຂອງຫມົດທຸກຄົນຢູ່ໃນສັງຄົມນິຍົດ ບາດເປັນການອອກແຮງງານແບບລວມຫມູ່ ເອກະພາບອັນດຽວ ທີ່ມີການ ຈັດ ຕັ້ງຢ່າງມີແຜນການຢູ່ໃນຂອບເຂດຂອງຫມົດທົ່ວສັງຄົມ ໂດຍແນໃສ່ນຳໃຊ້ ພາ ຫະນະການຜະລິດ ແລະ ແຮງງານຢ່າງຖືກຕ້ອງເຫມາະສົມກວ່າຫມູ.

ພາຍໃຕ້ລະບອບທຶນນິຍົມ ການສຳພັນການອອກແຮງງານ (ການສຳພັນ ແບບງ່າຍດາຍ, ໂຮງງານຫັດຖະກຳ; ການຜະລິດໃຫຍ່ ແບບໃຊ້ເຄື່ອງ ຈັກ ເຄື່ອງລາງ) ແມ່ນມີການເພີ່ມທະວີການຜະລິດ ລຸນຄ່າສ່ວນເກີນ, ມັນແມ່ນ ມີການເພີ່ມທະວີລະດັບການກົດຂີ່ຂູດຮີດຊາວຜູ້ອອກແຮງງານ. ຍ້ອນແນວ ນັ້ນ ຈຶ່ງຫລີກເວັ້ນບໍ່ໄດ້ທີ່ຈະບໍ່ໃຫ້ມີຂໍ້ຂັດແຍ່ງແບບບໍ່ລອງລອຍກັນໄດ້ ເປັນປະຈຳລະ ຫວ່າງຊາວກຳມະກອນທຳມະດາສາມັນ ທີ່ເຂົ້າຮ່ວມໃນການສຳພັນ ແລະພວກ ນາຍທຶນທີ່ເປັນຜູ້ຈັດຕັ້ງການສຳພັນດັ່ງກ່າວນັ້ນ.

ການສຳພັນການອອກແຮງງານແບບສັງຄົມນິຍົມ ມີບົດບາດເປັນການ - ເຄື່ອນໄຫວອອກແຮງງານສົມທົບຮ່ວມກັນ ຂອງຄົນ ຊຶ່ງແນໃສ່ເພີ່ມທະວີ ການ

ຜະລິດຊັບສິນທາງດ້ານວັດຖຸ, ຮັບປະກັນໃຫ້ມີການຕອບສະຫນອງໃຫ້ໄດ້ ຢ່າງເຕັມສ່ວນກວ່າເກົ່າ ຄວາມຮຽກຮ້ອງຕ້ອງການ ຂອງຊາວຜູ້ອອກແຮງງານ. ຍ້ອນແນວນີ້ ການສຳພັນການອອກແຮງງານແບບສັງຄົມນິຍົມ ຈຶ່ງບໍ່ມີຂໍ້ຂັດແຍ່ງ ແບບບໍ່ລ່ອງລອຍກັນທີ່ມີຢູ່ນຳການສຳພັນແບບທຶນນິຍົມ.

ການສຳພັນການອອກແຮງງານ ຫມາຍຄວາມວ່າ ການອອກແຮງງານສົມທົບຮ່ວມກັນ ຂອງຊາວຜູ້ອອກແຮງງານຫລາຍໆຄົນນັ້ນ ມັນຕ້ອງການໃຫ້ມີການ ຈັດຕັ້ງ. ມີຈຸດເດັ່ນພື້ນຖານອັນໃດແດ່ໃນການຈັດຕັ້ງການອອກແຮງງານ ພາຍ ໃຕ້ລະບອບສັງຄົມນິຍົມນີ້ ?

ຈຸດພິເສດຂອງການສຳພັນການອອກແຮງງານແບບສັງຄົມນິຍົມ ກໍ່ ແມ່ນ ເລື່ອງ ມີລະບຽບວິໄນ ໃນການອອກແຮງງານອັນໃຫມ່ ທີ່ແຕກຕ່າງກັນກັບອັນ ທີ່ເຄີຍມີກັນມາຢູ່ໃນລະບອບອື່ນໆ ກ່ອນຫນ້ານີ້ທັງຫມົດ ຊຶ່ງຕັ້ງຢູ່ບົນພື້ນຖານ - ການວາງທ່າທີແບບມີຄວາມຕື່ນຕົວ ຂອງຊາວຜູ້ອອກແຮງງານ ຕໍ່ຫນ້າທີ່ ວຽກ ງານຂອງຕົນ ແລະ ການຊ່ວຍເຫລືອຊຶ່ງກັນ ແລະ ກັນ ຖານເພື່ອນສະຫາຍ. ແຕ່ຄືດັ່ງ ວ.ອີ.ເລນິນ ໄດ້ເຄີຍຊີ້ບອກໃຫ້ເຫັນນັ້ນ ລະບຽບວິໄນອັນໃຫມ່ນີ້ ບໍ່ ແມ່ນຈະເກີດຂຶ້ນມາຈາກຄວາມມຸ່ງຫວັງອັນຈົບໆງາມໆໄດ້ດອກ ແຕ່ຕ້ອງຄ່ອຍໆ ສ້າງຂຶ້ນມາໂດຍຜ່ານຂະບວນວິວັດແຫ່ງການກໍ່ສ້າງສັງຄົມນິຍົມ ແລະ ຜ່ານ - ການວິວັດແຫ່ງການຕໍ່ສູ້ຢ່າງເນື້ອງນິດລຽນຕິດ ຕ້ານກັບຮ່ອງຮອຍເສດເຫລືອ ຂອງທຶນນິຍົມ. ຢູ່ໃນຫມູ່ຊາວຜູ້ອອກແຮງງານ ຢູ່ໃນວິສາຫະກິດສັງຄົມນິຍົມ ກໍ່ ຍັງມີບຸກຄົນປະເພດທີ່ຍັງບໍ່ທັນໄດ້ປະລະການເບິ່ງການອອກແຮງງານແບບເກົ່າ ເທື່ອ ແລະ ພວກນີ້ກໍ່ມີແຕ່ບົ່ນເຮັດວຽກງານແນວໃດໃຫ້ຫນ້ອຍທີ່ສຸດ ແຕ່ເວລາ ກອບໂກຍມາເປັນຂອງຕົນນັ້ນ ໃຫ້ໄດ້ຫລາຍທີ່ສຸດ. ຍ້ອນແນວນີ້ ການສຶກ ສາ ອົບຮົມຊາວຜູ້ອອກແຮງງານ ໃຫ້ວາງທ່າທີແບບກອມມູນິດຕໍ່ການອອກແຮງງານ ການຕໍ່ສູ້ຢ່າງເປັນລະບົບ ຕ້ານພວກທີ່ມ້າງເພລະບຽບວິໄນ ໃນການອອກແຮງ ງານນັ້ນ ຈຶ່ງແມ່ນຫນຶ່ງໃນບັນດາຫນ້າທີ່ ທີ່ສຳຄັນຍິ່ງ ຂອງລັດສັງຄົມນິຍົມ.

ການສຳພັນການອອກແຮງງານ ແບບສັງຄົມນິຍົມ ວາງຄາດຫມາຍໃຫ້ ມີ ການຊຸ້ນຳເສດຖະກິດແຫ່ງຊາດຢ່າງມີແຜນການ. ລັກສະນະສະເພາະພິເສດ- ຂອງມັນ ດ້ານຫນຶ່ງກໍ່ແມ່ນການປະຕິບັດລະບອບຫົວຫນ້າຢ່າງເຂັ້ມງວດ ແລະ ຢ່າງເດັດຂາດຢູ່ໃນການຜະລິດ ແລະ ອີກດ້ານຫນຶ່ງ ກໍ່ແມ່ນເລື່ອງການ ເຂົ້າ

ຮ່ວມຢ່າງກ້ວ້າງຂວ້າງ ແລະ ຕັ້ງໜ້າໜ້າວໜັ້ນທີ່ສຸດ ຂອງມວນຊົນຊາວຜູ້ອອກ
ແຮງງານ ຢູ່ໃນການຸມຄອງວິສາຫະກິດສັງຄົມນິຍົມ ແລະ ການຸມຄອງການ
ຜະລິດຂອງສັງຄົມທັງໜົດ.

ໜຶ່ງໃນບັນດາຫລັກການອັນສຳຄັນຍິ່ງ ໃນການສຳພັນການອອກແຮງງານ
ແບບສັງຄົມນິຍົມ ກໍ່ແມ່ນຫລັກການວ່າດ້ວຍການໄດ້ຮັບຜົນປະໂຫຍດທາງດ້ານ-
ວັດຖຸຂອງຜູ້ອອກແຮງງານ ໃນໜ່ວຍຜົນການອອກແຮງງານຂອງຕົນ. ການ-
ໄດ້ຮັບຜົນປະໂຫຍດອັນນີ້ນັ້ນໄດ້ມີການຮັບປະກັນກ່ອນອື່ນໜົດ ກໍ່ແມ່ນດ້ວຍການ
ແຈກຢາຍຕາມແຮງງານ ທີ່ເຮັດໃຫ້ຜູ້ອອກແຮງງານແຕ່ລະຄົນມີ ລາຍຮັບອີງ
ຕາມຈຳນວນ ແລະ ຄຸນນະພາບແຮງງານຂອງຜູ້ກ່ຽວ ໃນການຜະລິດຂອງສັງ
ຄົມ. ການປະຕິບັດຫລັກການເລື່ອນໄຫວເສດຖະກິດແບບງຸມຕົນເອງແລະມີກຳ
ໄລຢ່າງສະເໜີຕົ້ນສະເໜີປາຍ, ການເພີ່ມທະວີການຈ່າຍເງິນອຸດໜູນແລະ
ເງິນນະໂຍບາຍຈາກຄັງເພື່ອອຸ້ມໃຊ້ ຂອງສັງຄົມ, ການປັບປຸງເງື່ອນໄຂ-
ໃນການອອກແຮງງານໃຫ້ດີຂຶ້ນ ແລະ ອື່ນໆທັງໜົດເຫລົ່ານີ້ລ້ວນແຕ່ມີ ຄວາມ
ໝາຍສຳຄັນເຊັ່ນດຽວກັນ.

ຢູ່ໃນການຜະລິດສັງຄົມນິຍົມ ການຊຸກຍູ້ສິ່ງເສີມທາງດ້ານຈິດໃຈ ຕໍ່ການ
ອອກແຮງງານແມ່ນມີບົດບາດອັນສຳຄັນ, ລັດສັງຄົມນິຍົມແມ່ນສິ່ງເສີມຊາວ ຜູ
ອອກແຮງງານຜູ້ດີເດັ່ນ ແລະ ໝ່ວຍງານທີ່ກ້າວໜ້າຢູ່ໃນວິສາຫະກິດຕ່າງໆ.
ບຸກຄົນດັ່ງກ່າວນີ້ ໄດ້ຮັບການຍ້ອງຍໍດ້ວຍຫລຽນໄຊ ແລະ ຫລຽນກາ,ໃບຍ້ອງ
ຍໍກຽດຕິຍົດ, ຜູ້ອອກແຮງງານຜູ້ດີເດັ່ນກໍ່ໄດ້ຮັບນາມມະຍົດອັນມີກຽດສະຫງ່າ-
ແລະ ອື່ນໆ. ທັງໜົດເຫລົ່ານີ້ລ້ວນແຕ່ເປັນການເຮັດໃຫ້ຊາວຜູ້ອອກແຮງງານ
ມີຄວາມມຸ່ງຫວັງຢາກຜະລິດໃຫ້ໄດ້ຫລາຍກ່ວາເກົ່າ ແລະ ດີກ່ວາເກົ່າ.ຈິດໃຈ
ການແຂ່ງຂັນກັນຖ້ວນເພື່ອນສະຫາຍຄືຈຸດພິເສດຂອງການສຳພັນການອອກແຮງ
ງານແບບສັງຄົມນິຍົມ.

ຂະບວນການແຂ່ງຂັນສັງຄົມນິຍົມ ແລະບົດບາດຂອງມັນ

ຄັ້ງໄດ້ເວົ້າມາແລ້ວນັ້ນ ການ ປ່ຽນ
ແປງລັກສະນະໃນການອອກແຮງງານ
ພາຍໃຕ້ລະບອບສັງຄົມນິຍົມນັ້ນ ແມ່ນ
ພາໄປເຖິງບ່ອນຊາວຜູ້ອອກແຮງງານມີການວາງທ່າທີແບບໃໝ່ ຕໍ່ການອອກ-

ແຮງງານຢ່າງຫລີກເວັ້ນບໍ່ໄດ້. ທ່າທີແບບໃໝ່ ຕໍ່ການອອກແຮງງານອັນນີ້ໄດ ປະກົດຕົວອອກມາຢ່າງຈະແຈ້ງ ກໍ່ຄືໝູ່ໃນຂະບວນການແຂ່ງຂັນສັງຄົມນິຍົມ.

ການແຂ່ງຂັນສັງຄົມນິຍົມ ແມ່ນສ່ອງແສງເຖິງການພົວພັນແຫ່ງການຜະລິດ ຂອງສັງຄົມນິຍົມ, ການພົວພັນແບບຮ່ວມມືກັນ ຊ່ວຍເຫລືອຊຶ່ງກັນແລະກັນ ລະຫວ່າງຜູ້ອອກແຮງງານຢູ່ໃນສັງຄົມ ສັງຄົມນິຍົມ, ນອກນັ້ນຍັງສ່ອງແສງເຖິງການຕໍ່ສູ້ຂອງຊາວຜູ້ອອກແຮງງານດັ່ງກ່າວເພື່ອປະຕິ ບັດແຜນການຂະຫຍາຍເສດຖະກິດໃຫ້ໄດຕາມລະດັບຄາດໝາຍ ແລະ ລົ້ນລະ ດັບຄາດໝາຍ ແລະ ເພື່ອຍູ້ໜຸນລວມການຜະລິດ.

ການແຂ່ງຂັນສັງຄົມນິຍົມ ໄດ້ຮັບການໜຸນໃຊ້ເປັນວິທີການອັນໜຶ່ງ ທີ່ສຳ ຄັນຍິ່ງເພື່ອຍົກສູງສະມັດຖະພາບຂອງການອອກແຮງງານ ແລະ ປັບປຸງ ການ ຜະລິດໃຫ້ກ້າວໜ້າກວ່າເກົ່າ ບົນພື້ນຖານຄວາມຕ້ອງໜ້າອັນຫ້າວຫັນ ແລະຫ້ວ ຄິດລິເລີ່ມແບບປະດິດສ້າງ ຂອງຊາວຜູ້ອອກແຮງງານ. ດັ່ງ ວ.ອິ. ເລນິນ ໄດ້ຊີ້ບອກໃຫ້ເຫັນນັ້ນ ການແຂ່ງຂັນສັງຄົມນິຍົມແມ່ນວິທີການສ້າງ ກອມມູນິດ ອັນໜຶ່ງ.

ວ.ອິ.ເລນິນ ໄດ້ກຳນົດຫລັກການທີ່ມີຄວາມສຳຄັນຍິ່ງ ໃນການຈັດຕັ້ງ - ການແຂ່ງຂັນສັງຄົມນິຍົມ. ໃນນັ້ນກໍມີ: ການໂຄສະນາເຜີຍແຜ່ກ່ຽວກັບ ການ ແຂ່ງຂັນຢ່າງກວ້າງຂວາງ, ລັກສະນະສາມາດສົມທຽບໜາກຜົນຂອງການ - ແຂ່ງຂັນໃຫ້ໄດ, ລັກສະນະເຜີຍແຜ່ບົດຮຽນອັນນຳໜ້າ ແລະ ລັກສະນະຊ່ວຍ ເຫລືອຊຶ່ງກັນ ແລະ ກັນລະຫວ່າງຄູແຂ່ງຂັນດ້ວຍກັນ.

ເງື່ອນໄຂອັນໜຶ່ງ ທີ່ຈຳເປັນເພື່ອໃຫ້ມີການຈັດຕັ້ງການແຂ່ງຂັນສັງຄົມ ນິ ຍົມຢ່າງຖືກຕ້ອງນັ້ນ ກໍແມ່ນການປະຕິບັດຫລັກການວ່າດ້ວຍການມີສິດຜົນ ປະ ໂຫຍດທາງດ້ານວັດຖຸຂອງຊາວຜູ້ອອກແຮງງານ ໃນໜາກຜົນການອອກແຮງ- ງານຂອງພວກເຂົາເຈົ້າ.

ເມື່ອເຂົ້າຮ່ວມໃນການແຂ່ງຂັນເພື່ອປັບປຸງການຜະລິດໃຫ້ກ້າວໜ້າ ກວ່າ ເກົ່າ ແລະ ໜຸນໃຊ້ວິທີການອອກແຮງງານອັນດີເລີດກວ່າໜຸ່ມນັ້ນ ຊາວຜູ້ອອກ ແຮງງານແຕ່ລະຄົນມີການຄິດໄລ່ຢ່າງຖືກຕ້ອງທີ່ສຸດວ່າ "ແບບຢ່າງອັນດີເລີດ- ກວ່າໜຸ່ໃນການຈັດຕັ້ງການຜະລິດ ຈະຕ້ອງເຮັດໃຫ້ການອອກແຮງງານ ເບົ້າ ບາງລົງຢ່າງຫລີກເວັ້ນບໍ່ໄດ້ ແລະ ຈະເຮັດໃຫ້ບຸກຄົນທີ່ໄດດຳເນີນການຈັດຕັ້ງ

ອັນດີເລີດດັ່ງກ່າວນີ້ ມີການຊົມໃຊ້ຫລາຍຂໍ້ນຕົ່ມ ."[1]

ການແຂ່ງຂັນສັງຄົມນິຍົມຢູ່ ສ.ສ.ສ.ຊ ມີປະຫວັດການອັນສະຫງ່າລາສີ. ຮູບການອັນທຳອິດຂອງມັນກໍ່ແມ່ນຮູບການຈັດຕັ້ງ ວັນເສົາແດງ ກອມມູນິດໃນສະໄຫມສົງຄາມກາງເມືອງ. ເລນິນ ໄດ້ຫລິງເຫັນວ່າ ຫນໍ່ແຫນງອັນ ທຳອິດຂອງການວາງທ່າທີແບບໃຫມ່ຕໍ່ການອອກແຮງງານກໍຄືວັນເສົາແດງກອມມູນິດ-ນັ້ນເອງ ມັນແມ່ນ "ບັ້ນເປີດສາກໃຫ້ແກ່ການລັດຖະປະຫານອັນຫຍຸ້ງຍາກກ່ວາ, ຫນັກແຫນ້ນກວ່າ, ເຖິງຖອງກວ່າ ແລະ ຕັດສິນຊີ້ຂາດກວ່າການໂຄ່ນລົ້ມ ຊົນຊັ້ນນາຍທຶນ ທັງນີ້ກໍ່ຍອນວ່າອັນນີ້ແມ່ນການເອົາຊະນະກັບຄວາມໂງ່ຈ້າ ຫລ້າຫລັງ, ຄວາມບໍ່ເປັນລະບຽບຮຽບຮ້ອຍຂອງຕົນເອງ, ແນວຄິດຄັບແຄບ ແບບນາຍທຶນນ້ອຍ ຊຶ່ງແມ່ນຄວາມຊົນເຄີຍທີ່ລະບອບທຶນນິຍົມອັນເຊື່ອມຊາມ ໄດ້ປະໄວ້ໃຫ້ກຳມະກອນ ແລະ ຊາວນາສືບທອດ "[2]. ນັບຕັ້ງແຕ່ ນັ້ນເປັນຕົ້ນມາ ການແຂ່ງຂັນສັງຄົມນິຍົມ ກໍ່ໄດ້ຜ່ານພົ້ນໄລຍະຈຳນວນຫນຶ່ງເຊັ່ນ: ໄລຍະການອອກແຮງງານແບບຕະລຸມບອນ, ໄລຍະຂະບວນການເຮັດໄປຕາມແບບ ຢ່າງຂອງສະຕາຄາໂນຟ ແລະ ອື່ນໆ. ແມ່ນພັກກອມມູນິດທີ່ເປັນຜູ້ຊີ້ທິດສ່ອງ ທາງ ແລະ ສະຫນັບສະຫນູນອູ້ມຊູການແຂ່ງຂັນສັງຄົມນິຍົມຢູ່ ສ.ສ.ສ.ຊ ນັບຕັ້ງແຕ່ມີ້ທຳອິດທີ່ມີການເປີດຂະບວນການດັ່ງກ່າວນີ້ພຸ້ນ.

ໃນປະຈຸບັນນີ້ ຂະບວນການຂອງຜູ້ທີ່ອອກແຮງງານແບບຕະລຸມບອນ ແລະ ຫນ່ວຍງານກອມມູນິດ ແມ່ນກ້ວາງຂວາງທີ່ສຸດ. ຜູ້ທີ່ເຂົ້າຮ່ວມໃນຂະບວນການດັ່ງກ່າວນີ້ລ້ວນແຕ່ວາງຈຸດປະສົງໃຫ້ໄດ້ຮັບສະມັດຖະພາບ ໃນການອອກແຮງງານໃນລະດັບສູງສຸດ ທັງນີ້ກໍ່ຍອນວ່າການອອກແຮງງານກອມມູນິດ ກ່ອນອື່ນຫມົດກໍ່ແມ່ນການອອກແຮງງານ ທີ່ມີສະມັດຖະພາບສູງກວ່າຫມູ່. ພວກເຂົາ - ເຈົ້າເຂົ້າຮ່ວມຢ່າງຕັ້ງຫນ້າໃນການປະດິດສ້າງ ແລະ ນຳໃຊ້ເຂົ້າໃນ ຕົວຈິງກ່ຽວກັບເຕັກນິກອັນໃຫມ່ ແລະ ເຕັກໂນໂລຢີອັນກ້າວຫນ້າ, ພວກເຂົາເຈົ້າຕໍ່ສູ້ຢ່າງບໍ່ຮູ້ອິດຮູ້ເມື່ອຍຕ້ານກັບທຸກປະກົດການແນວຄິດໂງ່ຈ້າຫລ້າຫລັງແລະແນວຄິດຈາຮີດນິຍົມ ແຕ່ເພື່ອຢາກກຳໃຫ້ໄດ້ຍອດສູງສຸດໃນຜົນສຳເລັດທາງດ້ານ ວິ

---

[1] ວ.ອີ.ເລນິນ. ນິພົນຄົບຊຸດ, ເຫລັ້ມ ມ້ຝ, ຫນ້າ ຈ.ຄ.

[2] ວ.ອີ.ເລນິນ.. ນິພົນຄົບຊຸດ, ເຫລັ້ມ ມ້ຄ, ຫນ້າ ຄ.

ທະຍາສາດ ແລະ ເຕັກນິກນັ້ນ ມັນມີຄວາມຈຳເປັນທີ່ຈະຕ້ອງໄດ້ສຶກສາ ຮຳ
ຮຽນຢ່າງບໍ່ຮູ້ຈັກຮູ້ເມື່ອຍ ແລະ ກໍຕ້ອງຍົກລະດັບຄວາມຮູ້ຂຶ້ນຢູ່ຢ່າງເປັນປະຈຳ
ແລະຢ່າງເປັນລະບົບ.

ແຕ່ລະປີ ຂະບວນການແຂ່ງຂັນສັງຄົມນິຍົມ ກໍມັບມັນມີການຂະຫຍາຍ -
ກ້ວາງອອກຢູ່ໃນປະເທດສັງຄົມນິຍົມອື່ນໆເຊັ່ນດຽວກັນ. ຢູ່ໜົດທຸກບ່ອນທີ່ ອຳ
ນາດເປັນຂອງຊາວຜູ້ອອກແຮງງານ ແລະ ຄົນກໍບໍ່ແມ່ນເຮັດວຽກງານຮັບ ໃຊ້
ພວກນາຍທຶນແຕ່ຫາກແມ່ນຮັບໃຊ້ຕົນເອງແລ້ວ ຂະບວນເຄື່ອນໄຫວ -
ແບບປະດິດສ້າງຕໍ່ການອອກແຮງງານ.

ຂະບວນການແຂ່ງຂັນແມ່ນກຳລັງອັນຍິ່ງໃຫຍ່ ເພື່ອຍູ້ໜູນການຂະຫຍາຍ-
ຕົວຂອງສັງຄົມໃຫກ້າວໄປໜ້າຢູ່ໃນບັນດາປະເທດສັງຄົມນິຍົມ. ການແຂ່ງຂັນ
ສັງຄົມນິຍົມສ້າງເງື່ອນໄຂໃຫ້ເສດຖະກິດຂະຫຍາຍຕົວ ແລະ ສະມັດຖະພາບ
ຂອງການອອກແຮງງານເພີ່ມທະວີຂຶ້ນ. ການແຂ່ງຂັນສັງຄົມນິຍົມ ເປັນການ
ຢັ່ງຢືນໃຫ້ເຫັນວ່າ ຢູ່ໃນສັງຄົມທີ່ບໍ່ມີຄົນຂູດຮີດຄົນນັ້ນ ຍ່ອມມີປັດໄຈອັນ ໃໝ
ເກີດຂຶ້ນ ເພື່ອສົ່ງເສີມໃຫ້ການຜະລິດ ຂະຫຍາຍຕົວໃນຂອບເຂດອັນກ້ວາງ -
ຂວາງ ທີ່ບໍ່ເຄີຍມີຢູ່ພາຍໃຕ້ລະບອບທຶນນິຍົມ. ຢູ່ໃນເງື່ອນໄຂ ຂອງການຕໍ່ສູ
ຊ່ວງຊິງກັນ ບໍ່ອາດຈະມີການແລກປ່ຽນບົດຮຽນນຳກັນໄດ້ຢ່າງກ້ວາງຂວາງ ,
ແລະ ກໍບໍ່ອາດຈະມີການຮ່ວມມືນຳກັນຖານເພື່ອນສະຫາຍ ແລະ ມີການ ຊ່ວຍ
ເຫລືອຊິ່ງກັນ ແລະ ກັນໄດ້ໝາຍຄວາມວ່າ ບໍ່ອາດຈະມີການພົວພັນລະຫວ່າງ
ຄົນນຳກັນ ຜ່ານການຜະລິດປະເພດທີ່ມີສະເພາະແຕ່ຢູ່ກັບລະບອບສັງຄົມນິຍົມ-
ເທົ່ານັ້ນ.

๔. ການເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ຂອງສະມັດຖະພາບ ຂອງການອອກແຮງງານ ແມ່ນກົດໝາຍທາງດ້ານເສດຖະກິດ ຂອງສັງຄົມນິຍົມ

ສະມັດຖະພາບຂອງການອອກແຮງງານ ສະມັດຖະພາບ(ການມີໝາກ
ມີຜົນ, ປະສິດທິພາບ) ຂອງ
ການອອກແຮງງານແມ່ນຄິດໄລ່ອອກມາເປັນຈຳນວນຜະລິດຕະພັນທີ່ຜູ້ອອກແຮງ

ງານ ໄດ້ສ້າງຂຶ້ນມາ ພາຍໃນຫົວໜ່ວຍເວລາ ຫລື ແມ່ນມີການວັດແທກດ້ວຍ ກຳນົດເວລາ ເຮັດວຽກງານ ທີ່ໃຊ້ເຂົ້າ ໃນການຜະລິດ ຜະລິດຕະພັນ ຫົວ ໜ່ວຍໜຶ່ງ.

ການທີ່ສະມັດຖະພາບຂອງການອອກແຮງງານ ມີການເຕີບໃຫຍ່ຂະຫຍາຍ ຕົວນັ້ນ ມັນໝາຍເຖິງວ່າ ມີການປະຢັດການອອກແຮງງານ "ເປັນ"(ທີ່ສ້າງ ຄຸນຄ່າຂຶ້ນໃໝ່)ແລະມີການປະຢັດການອອກແຮງງານເປັນວັດຖຸ (ການອອກ ແຮງງານໃນທີ່ຜ່ານມາ). ກ.ມາກ ແລະ ຟ.ອັງແກນ ໄດ້ເຄີຍຊີ້ໃຫ້ ເຫັນ ວ່າ ການເພີ່ມທະວີສະມັດຖະພາບຂອງການອອກແຮງງານ ຢູ່ກະໂຕ່ບ່ອນທີ່ວ່າ ອັດຕາສ່ວນການອອກແຮງງານ "ເປັນ" ນັ້ນມີການຫລຸດຜ່ອນລົງ ສ່ວນອັດຕາ ສ່ວນການອອກແຮງງານເປັນວັດຖຸນັ້ນ ພັດມີການເພີ່ມຂຶ້ນແຕ່ການເພີ່ມຂຶ້ນແບບ ທີ່ວ່າ ມູນຄ່າຂອງການອອກແຮງງານລວມທີ່ປະກອບມີຢູ່ໃນສິນຄ້ານັ້ນ ມັນມີ - ການຫລຸດຜ່ອນລົງ; ຈາກນີ້ກໍເຫັນໄດ້ວ່າ ຈຳນວນການອອກແຮງງານ"ເປັນ" ມີການຫລຸດຜ່ອນລົງຫລາຍກວ່າ ການເພີ່ມທະວີຂຶ້ນຂອງການອອກແຮງ ງານ ໃນທີ່ຜ່ານມາ "๑).

ສະຫລຸບຄວາມແລ້ວ ເມື່ອເວົ້າເຖິງການເພີ່ມທະວີສະມັດຖະພາບ ຂອງ ການອອກແຮງງານນັ້ນ ເປັນທີ່ເຂົ້າໃຈນຳກັນວ່າ ແມ່ນມີການເພີ່ມທະວີ ຈຳ ນວນເຄື່ອງຂອງທີ່ຜະລິດອອກມາພາຍໃນຫົວໜ່ວຍເວລາ ຫລືແມ່ນມີການຫລຸດ ຜ່ອນການໃຊ້ຈ່າຍເວລາເຮັດວຽກງານ ທີ່ຈຳເປັນໃນການຜະລິດຜົນຂອງການ ອອກແຮງງານຫົວໜ່ວຍໜຶ່ງ.

ການເພີ່ມທະວີສະມັດຖະພາບຂອງການອອກແຮງງານຢ່າງບໍ່ຢຸດຢັ້ງ ນັ້ນ ແມ່ນເງື່ອນໄຂອັນໜຶ່ງທີ່ສຳຄັນຍິ່ງ ເພື່ອຂະຫຍາຍການຜະລິດ ສັງຄົມນິຍົມ. ເມື່ອເວົ້າເຖິງບົດບາດຂອງສະມັດຖະພາບຂອງການອອກແຮງງານພາຍໃຕ້ລະ ບອບສັງຄົມນິຍົມແລ້ວ ອ.ອີ.ເລນິນ ໄດ້ຊີ້ນໍາວ່າ: "ສະມັດຖະພາບ ຂອງ ການອອກແຮງງານ ສະຫລຸບແລ້ວນັ້ນກໍແມ່ນສິ່ງທີ່ມີຄວາມສຳຄັນກວ່າໝູ, ນັ້ນ ແມ່ນສິ່ງທີ່ຕັ້ນຕໍກວ່າໝູ ເພື່ອຮັບປະກັນໄຊຊະນະຂອງລະບອບສັງຄົມອັນໃໝ່. ທຶນນິຍົມໄດ້ສ້າງໃຫ້ມີສະມັດຖະພາບ ຂອງການອອກແຮງງານແບບບໍ່ເຄີຍເຫັນ

---

๑) ກ.ມາກ ແລະ ຟ.ອັງແກນ,ບົດນິພົນ,ເຫລັ້ມ ๔๕,ພາກ๑,ໜ້າ๔๒ຝ.

ຈັກເທື່ອພາຍໃຕ້ລະບອບທີ່ຊາວນາເປັນຂ້າທາດ. ການທີ່ສັງຄົມນິຍົມສ້າງໃຫ້ມີສະມັດຖະພາບຂອງການອອກແຮງງານອັນໃຫມ ທີ່ສູງກວ່າເກົ່າຕັ້ງເປັນຫລາຍເທົ່ານັ້ນ ຈະເຮັດໃຫ້ມີຄວາມສາມາດເອົາຊະນະທຶນນິຍົມໄດ້ຢ່າງສົມເຊີງແລະກໍຈະເອົາຊະນະມັນໄດ້ຢ່າງສົມເຊີງແທ້ "1).

ກົດເກນວ່າດ້ວຍການເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງຂອງສະມັດຖະພາບຂອງການ ອອກແຮງງານ

ການເຕີບໃຫຍ່ຂະຫຍາຍຕົວ ຂອງສະມັດຖະພາບຂອງການອອກແຮງ-ງານນັ້ນ ແມ່ນກົດເກນລວມ ທາງດ້ານເສດຖະກິດທີ່ມີການເຄື່ອນໄຫວຢູ່ໃນຫມົດທຸກຮູບຖານສັງຄົມ- ເສດຖະກິດ. ແຕ່ຢູ່ໃນຮູບຖານສັງຄົມເສດຖະກິດແຕກຕ່າງກັນນັ້ນ ກົດເກນດັ່ງ - ກ່າວນີ້ ກໍມີການເຄື່ອນໄຫວແບບຕ່າງກັນ. ການເຄື່ອນໄຫວຂອງກົດເກນ ດັ່ງ ກ່າວນີ້ ແມ່ນຂຶ້ນໂດຍກົງກັບການພົວພັນແຫ່ງການຜະລິດທີ່ເປັນເຈົ້າຄອບຄອງຢູ່ໃນສັງຄົມ, ກັບລັກສະນະ, ສະພາບການແລະເປົ້າຫມາຍ ຂອງການຜະລິດຂອງສັງຄົມ. ພາຍໃຕ້ລະບອບທຶນນິຍົມ ການເຄື່ອນໄຫວຂອງກົດເກນດັ່ງກ່າວ ນີ້ ມີຂຶ້ນຈຳກັດ ແລະ ການເຕີບໃຫຍ່ຂະຫຍາຍຕົວຂອງສະມັດຖະພາບຂອງ - ການອອກແຮງງານ ກໍມີລັກສະນະບໍ່ສະຫມ່ຳສະເຫມີແລະ ໃນບາງໄລຍະ ສະ ມັດຖະພາບຂອງການອອກແຮງງານກໍຕະຫລອດຮອດວ່າມີການຫລຸດຜ່ອນລົງ.

ພາຍໃຕ້ລະບອບສັງຄົມນິຍົມ ຄຽງຄູ່ກັບການລຶບລ້າງຢ່າງສົມເຊີງ ກຳມະ ສິດສ່ວນຕົວ ກ່ຽວກັບພາຫະນະການຜະລິດແລ້ວ ມັນກໍໄດ້ມີການລຶບລ້າງ ຢ່າງ ສົມເຊີງແບບບໍ່ໃຫ້ມີອຸປະສັກໃດໆເລີຍ ກົດຂ້າງເສັ້ນທາງແຫ່ງການເຕີບໃຫຍ ຂະຫຍາຍຕົວຂອງສະມັດຖະພາບຂອງການອອກແຮງງານ. ຢູ່ໃນສັງຄົມ ສັງ ຄົມນິຍົມ ການເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ຂອງສະມັດຖະພາບ ການ ອອກແຮງງານ ແມ່ນຄວາມຈຳເປັນຢ່າງພາວະວິໄສ ທີ່ອອກມາຈາກກະໂຕ - ທາດແທ້ເນື້ອໃນຂອງການພົວພັນແຫ່ງການຜະລິດ ແບບສັງຄົມນິຍົມນັ້ນເອງ. ກ.ມາກ ໄດ້ຂຽນໄວ້ວ່າ:"... ການປະຢັດເວລາ ເຊັ່ນດຽວກັນກັບ ການ

---

1) ວ.ອິ.ເລນິນ. ນິພົນຄົບຊຸດ, ເຫລັ້ມ ໓໙, ຫນ້າ ๘๑.

ສັບຊ້ອນເວລາເຮັດວຽກງານຢ່າງມີແຜນການ ຢູ່ຕາມຂະແໜງການຕ່າງ ໆ ຂອງການຜະລິດນັ້ນ ຍັງສືບຕໍ່ເປັນກົດເກນທາງດ້ານເສດຖະກິດອັນດັບໜຶ່ງບົນພື້ນຖານການຜະລິດແບບລວມໝູ່. ທັງໝົດນັ້ນ ຮອດວ່າກ້າວມາເປັນກົດເກນຢູ່ໃນລະດັບສູງກວ່ານັ້ນຕ້ອງເທົ່າໃດເທົ່າພຽນ "๑).

ຈາກທີ່ໄດ້ເວົ້າມານັ້ນ ສະຫລຸບໄດ້ ໂດຍແຕກຕ່າງກັນກັບສັງຄົມທຶນນິຍົມ-ບ່ອນທີ່ກົດເກນວ່າດ້ວຍການເຕີບໃຫຍ່ຂະຫຍາຍຕົວ ຂອງສະມັດຖະພາບ ຂອງການອອກແຮງງານ ບໍ່ມີລັກສະນະຕັດສິນຊີ້ຂາດນັ້ນ ຢູ່ໃນສັງຄົມ ສັງຄົມນິຍົມ-ແມ່ນມີການເຄື່ອນໄຫວຂອງກົດເກນວ່າດ້ວຍການເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງຂອງສະມັດຖະພາບຂອງການອອກແຮງງານ. ເນື່ອໃນຕົ້ນຕໍຂອງ ກົດເກນວ່າດ້ວຍການເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ຂອງສະມັດຖະພາບ - ຂອງການອອກແຮງງານ ກໍ່ແມ່ນບັນຫາການປະຢັດແຮງງານ "ເປັນ" ແລະ ແຮງງານເປັນວັດຖຸ (ໃນທີ່ຜ່ານມາ) ຢ່າງສູດຊຶດ, ການສ້າງໃຫ້ມີຊັບສິນ - ທາງດ້ານວັດຖຸເປັນຈຳນວນນັບມື້ນັບທະວີຄູນຂຶ້ນ ດ້ວຍການໃຊ້ຈ່າຍ ແຮງງານ ໃນລະດັບຕ່ຳສຸດ ຍ້ອນວ່າຊັບສິນດັ່ງກ່າວນີ້ມີຄວາມຈຳເປັນເພື່ອຕອບສະໜອງ ໃຫ້ໄດ້ຢ່າງເຕັມສ່ວນກວ່າເກົ່າ ຄວາມຮຽກຮ້ອງຕ້ອງການອັນທະວີຄູນຂຶ້ນເປັນ ປະຈຳຂອງສັງຄົມ ສັງຄົມນິຍົມ.

ປັດໄຈແຫ່ງການເຕີບໃຫຍ່ຂະ ຫຍາຍຕົວຂອງສະມັດຖະພາບ ຂອງການອອກແຮງງານ	ການເຕີບໃຫຍ່ຂະຫຍາຍຕົວຂອງ ສະ ມັດຖະພາບ ຂອງການອອກແຮງງານ ນັ້ນ ແມ່ນຂຶ້ນກຳປັດໄຈພື້ນຖານອັນໃດ ແດ ? ກ.ມາກ ໄດ້ຊີ້ບອກໃຫ້ ເຫັນ

ວ່າ ສະມັດຖະພາບຂອງການອອກແຮງງານ ແມ່ນກຳນົດອອກມາຈາກສະພາບ ແວດລ້ອມອັນມີຫລາຍຮູບຫລາຍສີ, ເປັນຕົ້ນກໍ່ແມ່ນກຳນົດອອກມາຈາກ ລະດັບ ສີໄມ້ລາຍມືປາມກາງ ຂອງກຳມະກອນ, ລະດັບການຂະຫຍາຍຕົວຂອງວິທະ-ຍາສາດ ແລະ ລະດັບການໝູນໃຊ້ວິທະຍາສາດ ເຂົ້າໃນເຕັກໂນໂລຢີ ການ ຜະລິດ, ຈາກການປະສົມປະສານການວິວັດແຫ່ງການຜະລິດໃນຫລາຍຮູບຫລາຍ

---

๑) ເອກະສານຂອງມາກ ແລະ ອັງແກນ, ເຫລັ້ມ ๔, ໜ້າ ๑๑๗.

ສີຢູ່ໃນສັງຄົມ, ຂະຫນາດ ແລະ ປະສິດທິພາບຂອງພາຫະນະການຜະລິດ,ສະ ພາບເງື່ອນໄຂທາງດ້ານທຳມະຊາດ "[1].

ລະດັບສະມັດຖະພາບຂອງການອອກແຮງງານ ກ່ອນອື່ນຫມົດ ກໍ່ແມ່ນ ກຳ ນົດອອກມາຈາກລະດັບການປະກອບເຕັກນິກ ຂອງວິສາຫະກິດ. ຍິ່ງມີການປະ ກອບເຄື່ອງຈັກ ແລະ ກົນຈັກອັນໃຫມ່ໆ ແລະ ທັນສະໄຫມໃຫ້ຊາວຜູ້ອອກແຮງ ງານ ຢູ່ໃນວິສາຫະກິດໄດ້ດີເທົ່າໃດ ການອອກແຮງງານ ຂອງພວກເຂົາເຈົ້າ ກໍ່ຍິ່ງຈະມີຫມາກຜົນຫລາຍຂັ້ນເທົ່ານັ້ນ. ໃນການຕໍ່ສູ້ເພື່ອເພີ່ມທະວີສະມັດຖະ-ພາບຂອງການອອກແຮງງານນັ້ນ ຜູ້ທີ່ໄດ້ຮັບຫມາກຜົນອັນສູງກວ່າຫມູ່ ກໍ່ລ້ວນ-ແຕ່ແມ່ນຫນ່ວຍງານຢູ່ໃນວິສາຫະກິດບ່ອນໃດທີ່ມີການເລີ່ມຕົ້ນນຳໃຊ້ເຕັກນິກ - ແລະ ເຕັກໂນໂລຢີອັນທັນສະໄຫມຢ່າງຄົບຊຸດເຂົ້າໃນຫມົດທຸກຂົງເຂດ ແລະ ຂັ້ນຕ່າງໆ ຂອງຂະບວນວິວັດແຫ່ງການຜະລິດ. ຍົກຕົວຢ່າງ ຖ້າຫາກວ່າ ມີ ການເລີ່ມຕົ້ນນຳໃຊ້ເຕັກນິກອັນໃຫມ່ ຢູ່ໃນຂົງເຂດຕົ້ນຕໍ ຂອງການຜະລິດແລະ ຈາກນີ້ ສະມັດຖະພາບຂອງການອອກແຮງງານ ກໍ່ມີການເພີ່ມທະວີຂັ້ນ ດັ່ງນັ້ນ ມັນມີຄວາມຈຳເປັນ ທີ່ຈະຕ້ອງປະກອບກົນຈັກເຂົ້າໃຫ້ການອອກແຮງງານບ່ອນ ອື່ນໆ ທີ່ມີການພົວພັນກັບການຜະລິດຕົ້ນຕໍນຳອີກ. ຢູ່ໃນນີ້ ກ່ອນອື່ນຫມົດກໍ່ແມ່ນ ຕ້ອງເວົ້າເຖິງວຽກງານຂົນສົ່ງ, ວຽກງານຂ່ຽນຖ່າຍ, ວຽກງານກວດກາແລະ ວຽກງານປະກອບຕິດຕັ້ງ ແລະ ອື່ນໆ. ການປະກອບເຄື່ອງກົນຈັກເຂົ້າ ໃນ ວຽກງານປະເພດນີ້ ບໍ່ວ່າຢູ່ໃນການຜະລິດອຸດສາຫະກຳ ກໍ່ຄືຢູ່ໃນການ ຜະລິດ ກະສິກຳນັ້ນ ໄດ້ສ້າງເງື່ອນໄຂ ໃຫ້ສາມາດລົບລ້າງບໍ່ໃຫ້ມີການອອກແຮງງານ ດ້ວຍຕົນມື ແລະ ກໍ່ເພີ່ມຕົວເລກຄາດຫມາຍສະມັດຖະພາບ ຂອງການ ອອກ ແຮງງານຂັ້ນຕັ້ງຫລາຍເທົ່າ.

ການປະກອບເຄື່ອງກົນຈັກຢ່າງຄົບຊຸດ ແລະ ການປະກອບລະບົບອັດຕະ-ໂນມັດຢ່າງຄົບຊຸດ ເຂົ້າໃນການຜະລິດ ລ້ວນແຕ່ເປັນຂອດ ກຸນແຈເພື່ອ ກ້າວ ໄປສູ່ການດັດສ້າງເຕັກນິກຕໍ່ຫມົດທຸກຂະແຫນງການ ຂອງເສດຖະກິດ ແຫ່ງ ຊາດ. ພ້ອມກັນກັບການປະຕິບັດການປະກອບເຄື່ອງກົນຈັກ ແລະ ລະບົບອັດ-ຕະໂນມັດ ຢ່າງຄົບຊຸດ, ການຕິດຕັ້ງໄຟຟ້າ, ການປະກອບເຄມີເຂົ້າໃນການ

---

[1] ກ.ມາກ ແລະ ຟ.ອັງແກນ. ບົດນິພົນ, ເຫລັ້ມ ๔ມ, ຫນ້າ ๔ຊ.

ຜະລິດ, ພ້ອມກັນກັບການປັບປຸງການຈັດຕັ້ງ ການຜະລິດ ແລະການອອກແຮງ
ງານ ໃຫ້ດີຂຶ້ນກວ່າເກົ່າ, ການເພີ່ມທະວີລະດັບຄວາມອຸດົມສົມບູນທາງດ້ານ
ເຕັກນິກ ໃນການຜະລິດຂອງຜູ້ອອກແຮງງານນັ້ນ ການຜະລິດສັງຄົມນິຍົມກໍ່ໄດ
ກ້າວເຂົ້າໄປສູ່ການຂະຫຍາຍຕົວໃນໄລຍະໃໝ່ ທີ່ສູງກວ່າເກົ່າ.

ເຖິງວ່າຢູ່ໃນເງື່ອນໄຂຂອງການຜະລິດ ແບບທັນສະໄໝນີ້ ວິທະຍາສາດ
ແລະເຕັກນິກຈະມີຄວາມໝາຍສຳຄັນອັນຍິ່ງໃຫຍ່ປານໃດ ກໍ່ຕາມ ແຕ່ກຳລັງ-
ການຜະລິດອັນຕົ້ນຕໍຂອງສັງຄົມ ກໍ່ຍັງແມ່ນກະໂຕຄົນ ນັ້ນເອງ. ຍ້ອນແນວນັ້
ລະດັບສະມັດຖະພາບຂອງການອອກແຮງງານ ແລະ ຄວາມອາດສາມາດ ໃນ
ການສືບຕໍ່ຮັດໃຫ້ມັນມີການເຕີບໃຫຍ່ຂະຫຍາຍຕົວນັ້ນ ທັງໝົດເຫລົ່ານີ້ ຈຶ່ງ
ຂຶ້ນຢ່າງຫລວງຫລາຍນຳລະດັບຄວາມເກັ່ງກ້າສາມາດ, ລະດັບຄວາມອຸດົມສົມ
ບູນທາງດ້ານເຕັກນິກຂອງມວນຊົນ ຊາວຜູ້ອອກແຮງງານ ສ່ວນໃຫຍ່ຢູ່ວິສາ-
ຫະກິດ ແລະ ກອນຶ່ໝົດ ມັນກໍ່ແມ່ນຂຶ້ນກັບພວກກຳມະກອນ. ການ ອອກ
ແຮງງານຂອງກຳມະກອນຜູ້ມີຄວາມອຸດົມສົມບູນ ບໍ່ສະເພາະພຽງແຕ່ມີສະມັດ
ຖະພາບສູງກວ່າເທົ່ານັ້ນ. ການເພີ່ມທະວີລະດັບຄວາມອຸດົມສົມບູນຂຶ້ນ ຍັງ
ສ້າງເງື່ອນໄຂໃຫ້ກຳມະກອນມີຄວາມອາດສາມາດນຳໃຊ້ເຕັກນິກທີ່ມີຢູ່ແລ້ວໃຫ
ໄດ້ດີກວ່າເກົ່າ ແລະ ທັງຊອກເຫັນເສັ້ນທາງເພື່ອປັບປຸງເຕັກນິກດັ່ງກ່າວນີ້ໃຫ
ກ້າວໜ້າກວ່າເກົ່າ.

ສະມັດຖະພາບຂອງການອອກແຮງງານ ຢູ່ວິສາຫະກິດແມ່ນຂຶ້ນກັບການຈັດ
ຕັ້ງການຜະລິດ ແລະ ການອອກແຮງງານຢູ່ໃນລະດັບສູງ. ເປັນທີ່ຮູ້ນຳກັນວ່າ
ຂະບວນວິວັດແຫ່ງການຜະລິດ ຈະແມ່ນອັນໃດກໍ່ຕາມ ແມ່ນຂັ້ນຕ່າງໆ ທັງໝົດ
ທີ່ເປັນລະບົບສາຍໄຍ ທີ່ເປົ້າໝາຍແຫ່ງການອອກແຮງງານຕ້ອງໄດຜ່ານ ຜ່ານ
ໃນເວລາມີການປ່ຽນແປງຢູ່ໃນຂົງເຂດຕ່າງໆຂອງການຜະລິດ. ມັນຈະຕ້ອງ ມີ
ການແບ່ງເຂດການຜະລິດຢ່າງຈະແຈ້ງ, ລະຫວ່າງຂົງເຂດດັ່ງກ່າວນີ້ ແລະສະ
ເພາະວຽກງານຢູ່ໃນແຕ່ລະພາກສ່ວນແລ້ວ, ມັນກໍ່ຕ້ອງມີການຈັດຕັ້ງດີ ແລະກໍ່
ຕ້ອງກົມກຽວກັນດີ. ຫລືເວົ້າອີກຢ່າງໜຶ່ງ ມີຄວາມຈຳເປັນທີ່ຈະຕ້ອງມີການ
ປະສານສົມທົບນຳກັນຢ່າງເຂັ້ມງວດ ລະຫວ່າງຂົງເຂດດັ່ງກ່າວນີ້ນຳກັນ ທາງ
ດ້ານການຈັດຕັ້ງ, ຕ້ອງມີການຈັດຕັ້ງຮັບໃຊ້ວຽກງານຢ່າງຄົບຖ້ວນ ຢູ່ບ່ອນຮັດ
ວຽກແຕ່ລະແຫ່ງ ແລະ ຢູ່ແຕ່ລະຂົງເຂດຂອງການຜະລິດ. ບໍ່ວ່າຢູ່ສະເພາະ-

ພາຍໃນວິສາຫະກິດສັງຄົມນິຍົມ ແຕ່ລະບ່ອນຕ່າງຫາກ ກໍ່ຄືລະຫວ່າງວິສາ ຫະກິດນຳກັນ ມັນກໍ່ມີສາຍພົວພັນດ້ານການຈັດຕັ້ງຄືແນວນີ້ໆ. ການຈັດຕັ້ງການຜະລິດຢ່າງຖືກຕ້ອງ ແລະ ຈະແຈ້ງກໍ່ຄືການຈັດຕັ້ງການອອກແຮງງານ ຢູ່ແຕ່ລະ-ບ່ອນທີ່ເຮັດວຽກງານສະເພາະຕ່າງຫາກຢ່າງມີການຄົ້ນຄິດຕຶກຕອງຄັກແນ່ ນັ້ນເຮັດໃຫ້ມີການຫລຸດຜ່ອນການເສຍເວລາເຮັດວຽກງານ ແລະ ການຫມູນໃຊ້-ເວລາເຮັດວຽກງານຢ່າງບໍ່ຖືກຕ້ອງເຫມາະສົມ.

ການເສີມຂະຫຍາຍການແຂ່ງຂັນກັນຢູ່ພາຍໃນວິສາຫະກິດ ແລະ ແຂ່ງຂັນກັນລະຫວ່າງວິສາຫະກິດ ນຳກັນ ພາຍໃຕ້ຮູບການຕ່າງໆນັ້ນ ລ້ວນແຕ່ມີຜົນສະທ້ອນຢ່າງຫລວງຫລາຍຕໍ່ການເຕີບໃຫຍ່ຂະຫຍາຍຕົວຂອງສະມັດຖະພາບ ຂອງການອອກແຮງງານ.

ສະມັດຖະພາບຂອງການອອກແຮງງານ ກໍ່ແມ່ນຂໍ້ນກັບເງື່ອນໄຂທາງດ້ານທຳມະຊາດອີກເຊັ່ນດຽວກັນ. ເງື່ອນໄຂທາງດ້ານທຳມະຊາດ ມີຜົນສະທ້ອນ-ຢ່າງຫລວງຫລາຍຕໍ່ສະມັດຖະພາບຂອງການອອກແຮງງານໃນການຜະລິດກະສິກຳ ແລະ ໃນອຸດສາຫະກຳຂຸດຄົ້ນແຮ່ (ອຸດສາຫະກຳຂຸດຄົ້ນຖ່ານຫີນ, ນຳ້ມັນແຮ່ເຫລັກ ແລະ ອື່ນໆ).

ການເຕີບໃຫຍ່ຂະຫຍາຍຕົວຂອງສະມັດຖະພາບຂອງການອອກແຮງງານກໍ່ແມ່ນຂໍ້ນເຊັ່ນດຽວກັນກັບບັນຫາການຈັດຕັ້ງການຈ່າຍຄ່າອອກແຮງ, ບັນຫາ - ການສົ່ງເສີມທາງດ້ານວັດຖຸ ຕໍ່ຊາວຜູ້ອອກແຮງງານ ທີ່ໄດ້ມີຜົນງານດີກວ່າຫມູ່.

ວິທະຍາສາດຍິ່ງຂະຫຍາຍຕົວຢູ່ໃນລະດັບສູງເທົ່າໃດ, ຜົນສຳເລັດ ອັນຫລ້າສຸດຂອງການປະຕິວັດທາງດ້ານວິທະຍາສາດ-ເຕັກນິກ ຍິ່ງມີການເລີ່ມຕົ້ນຖືກນຳໃຊ້ເຂົ້າໃນການຜະລິດຢ່າງກວ້າງຂວາງ ແລະ ໄວວາເທົ່າໃດ ສະມັດຖະພາບຂອງການອອກແຮງງານຢູ່ໃນສັງຄົມ ກໍ່ຍິ່ງສູງຂໍ້ນເທົ່ານັ້ນ. ລະບົບ-ເສດຖະກິດສັງຄົມນິຍົມ ສ້າງໃຫ້ມີຄວາມອາດສາມາດອັນກວ້າງຂວາງໃນການຜູກພັນວິທະຍາສາດກັບການຜະລິດວັດຖຸໃຫ້ມີສາຍພົວພັນຢ່າງຮອບດ້ານນຳກັນ.

ປັດໄຈອັນສຳຄັນຍິ່ງ ເພື່ອເພີ່ມທະວີສະມັດຖະພາບຂອງການອອກແຮງ - ງານ ກໍ່ແມ່ນບັນຫາການຈັດວາງການຜະລິດຢ່າງຖືກຕ້ອງ ແລະ ເຫມາະສົມ. ໃນການຈັດວາງການຜະລິດ ດ້ານຫນຶ່ງຕ້ອງຄາດຄະເນໃຫ້ມີການແບ່ງ ເຂດການຜະລິດຢ່າງຈະແຈ້ງ ລະຫວ່າງວິສາຫະກິດຕ່າງໆນຳກັນ ແລະ ມີການສົມ

ທົບການຜະລິດນຳກັນ, ແລະ ອີກດ້ານຫນຶ່ງ ກໍຈະຕ້ອງຄຳນຶງເຖິງຄວາມ ຈຳ ເປັນທີ່ຈະຕ້ອງນຳເອົາຊັບພະຍາກອນທຳມະຊາດ ເຂົ້າມາຮວມໃນຮອບ ຫມູນ ວຽນເສດຖະກິດໃຫ້ໄດ້ຢ່າງເຕັມສ່ວນກວ່າເກົ່າ. ການຈັດວາງການ ຜະລິດ ຢ່າງຖືກຕ້ອງ ພາໃຫ້ຫລຸດຜ່ອນການສົ້ນເປືອງແຮງງານຂອງສັງຄົມ ເຂົ້າ ໃສ ການຜະລິດ, ການຂົນສົ່ງ, ການເກັບມ້ຽນ ແລະ ການຈຳຫນ່າຍຊັບສົມບັດ-ທາງດ້ານວັດຖຸ. ສະເພາະການຫລຸດຜ່ອນການສົ້ນເປືອງແຮງງານແລ້ວ ມັນກໍ ຫມາຍເຖິງການເພີ່ມທະວີສະມັດຖະພາບຂອງມັນຂຶ້ນ.

ປັດໄຈອັນສຳຄັນກວ່າຫມູ ແລະ ຕັດສິນຊີ້ຂາດກວ່າຫມູ ເພື່ອເພີ່ມທະວີສະ ມັດຖະພາບຂອງການອອກແຮງງານຂອງສັງຄົມນັ້ນ ກໍແມ່ນຄວາມກ້າວຫນ້າ - ທາງດ້ານເຕັກນິກຢູ່ໃນຫມຶດທຸກຂະແຫນງການຂອງເສດຖະກິດແຫ່ງຊາດ.ແມ່ນ ຍ້ອນເຫດຜົນອັນນີ້ໆເອງ ທີ່ການປະຕິບັດການປະກອບເຄື່ອງກົນຈັກຢ່າງ ຄົບ ຊຸດ, ການປະກອບລະບົບອັດຕະໂນມັດ, ການຕິດຕັ້ງໄຟຟ້າການປະກອບເຄມີ ເຂົ້າໃນການຜະລິດ, ການປັບປຸງການຈັດຕັ້ງການຜະລິດ ແລະ ການອອກ - ແຮງງານໃຫ້ດີກວ່າເກົ່າ, ການເພີ່ມທະວີລະດັບຄວາມຊຳນິຊຳນານ ທາງດ້ານ ເຕັກນິກໃນການຜະລິດ ຂອງຊາວຜູ້ອອກແຮງງານ ທັງຫມົດເຫລົ່ານີ້ ຈຶ່ງມີ ຄວາມຫມາຍສຳຄັນຢ່າງໃຫຍ່ຫລວງ.

ອີງຕາມຈັງຫວະໃນການເຕີບໃຫຍ່ຂະຫຍາຍຕົວ ຂອງສະມັດຖະພາບຂອງ ການອອກແຮງງານນັ້ນ ບັນດາປະເທດສັງຄົມນິຍົມ ແມ່ນໄດ້ເປັນອັນດັບທີ່ຫນຶ່ງ ຢູ່ໃນໂລກ. ຖ້າຫາກວ່າໃນປີ ໑໙໑໓ ສະມັດຖະພາບໃນການອອກແຮງງານ-ທາງດ້ານອຸດສາຫະກຳຂອງປະເທດລັດເຊຍ ກ່ອນການປະຕິວັດໄດ້ຫລຸດສະຫະ ລັດອາເມລິກາຮອດ ໙ ເທື່ອພຸ້ນ ແຕ່ມາໃນປີ ໑໙໒໐ ການຫລຸດລົ້ນກັນ ລະ ຫວ່າງສະຫະລັດອາເມລິກາ ກັບສະຫະພາບໂຊວຽດ ແມ່ນໄດ້ຫຍໍ້ລົງຮອດ໑,໗ ເທື່ອແລ້ວ. ມາດຽວນີ້ ສະມັດຖະພາບຂອງການອອກແຮງງານຢູ່ ສ.ສ.ສ.ຊ ແມ່ນສູງກວ່າຢູ່ໃນບາງປະເທດທຶນນິຍົມ ທີ່ຂະຫຍາຍຕົວ.

ການຊຸກຍູ້ສະມັດຖະພາບຂອງການອອກແຮງງານຂຶ້ນນີ້ ແມ່ນເປັນບໍ່ ເກີດ ອັນຕົ້ນຕໍເພື່ອຂະຫຍາຍບໍລິມາດການຜະລິດອອກຕື່ມ ແລະ ເພື່ອເພີ່ມທະວີລາຍ ໄດ້ແຫ່ງຊາດ. ຕົວຢ່າງຢູ່ ສ.ສ.ສ.ຊ ໃນ ໑໕ ປີຫລັງມານີ້ ຈາກການເຕີບ ໃຫຍ່ຂະຫຍາຍຕົວ ຂອງສະມັດຖະພາບ ຂອງການອອກແຮງງານ ມັນກໍໄດ້ພາ

ໃຫ້ເກີດມີປະມານ ໗໐% ຂອງອັດຕາສ່ວນເພີ່ມເຕີມ ໃນການຜະລິດອຸດສາຫະ ກຳ ແລະ ຫລາຍກວ່າ ໗໐% ຂອງອັດຕາສ່ວນເພີ່ມເຕີມຂອງລາຍໄດ ແຫ່ງ ຊາດ. ຢູ່ໃນການຜະລິດກະສິກຳ ອັດຕາສ່ວນເພີ່ມເຕີມ ໃນການຜະລິດ ແມ່ນ ໄດ້ມາຈາກການເພີ່ມທະວີສະມັດຖະພາບ ຂອງການອອກແຮງງານ. ຢູ່ໃນ - ແຜນການຫ້າປີກ່ຽວກັບການຂະຫຍາຍເສດຖະກິດແຫ່ງຊາດຢູ່ ສ.ສ.ສ.ຊ ໃນ ໄລຍະປີ ໑໙໖໑-໑໙໖໕ ໄດ້ມີການຄາດໝາຍໃຫ້ໄດ້ຮັບ ໙໐% ຂອງອັດ ຕາ ສ່ວນເພີ່ມທະວີທັງໝົດຂອງການຜະລິດອຸດສາຫະກຳ ຈາກການເພີ່ມທະວີ ສະ ມັດຖະພາບຂອງການອອກແຮງງານ.

ການເພີ່ມທະວີສະມັດຖະພາບຂອງການອອກແຮງງານ ແມ່ນບັນຫາກົງ - ເຄົ້າຂອງນະໂຍບາຍ ແລະ ພາກຕົວຈິງດ້ານການກໍ່ສ້າງສັງຄົມນິຍົມ, ແມ່ ນເງື່ອນໄຂອັນຂາດບໍ່ໄດ້ ເພື່ອຍູ້ໃຫ້ການຜະລິດເຕີບໃຫຍ່ຂະຫຍາຍຕົວດ້ວຍ ຈັງ ຫວະອັນເລັ່ງລັດ, ແມ່ນການເພີ່ມທະວີລະດັບຄວາມຢູ່ດີກິນດີ ຂອງປະຊາຊົນ ແລະ ສ້າງໃຫ້ມີຄວາມຮັ່ງມີ ທາງດ້ານວັດຖຸ ແລະ ວັດທະນະທຳຢ່າງ ລົ້ນ ເຫລືອສຳລັບຊາວຜູ້ອອກແຮງງານ.

ແມ່ນຍ້ອນແນວນີ້ໆເອງ ທີ່ບັນຫາການນຳໃຊ້ຄວາມອາດສາມາດ ທັງໝົດ ໃນການເພີ່ມທະວີສະມັດຖະພາບ ຂອງການອອກແຮງງານ ຈຶ່ງມີຢູ່ກັບແຕ່ລະວົ ສາຫະກິດ ແລະ ແຕ່ລະບ່ອນ ແຕ່ລະທີ່ ຈຶ່ງມີຄວາມສຳຄັນ.

ຄຳຖາມເພື່ອທວນຄືນ

໑. ພາຍໃຕ້ລະບອບສັງຄົມນິຍົມ ຈຸດພິເສດກ່ຽວກັບລັກສະນະຂອງການ ອອກ ແຮງງານມີຫຍັງແດ່ ?

໒. ການສຳພັນການອອກແຮງງານແບບສັງຄົມນິຍົມ ມີທ່າດີເລີດອັນໃດແດ່ ?

໓. ການແຂ່ງຂັນສັງຄົມນິຍົມ ມີບົດບາດຫຍັງແດ່ ໃນການເພີ່ມທະວີ ປະສິດທິ ພາບຂອງການຜະລິດ ?

໔. ສະມັດຖະພາບຂອງການອອກແຮງງານ ແມ່ນຫຍັງ ແລະ ມັນນຳຫຍັງ ?

ພາກ ສິບສາມ

ການຜະລິດສິນຄ້າ, ເງິນ ແລະ ການຄ້າ

ຈ. ການຜະລິດສິນຄ້າ ຢູ່ໃນລະບອບສັງຄົມນິຍົມ

ຄວາມຈຳເປັນ ແລະ ຈຸດພິເສດຂອງ ການຜະລິດສິນຄ້າຢູ່ໃນລະບອບສັງຄົມ ນິຍົມ

ມີຫລາຍສາຍເຫດທີ່ພາໃຫ້ ມີ ຄວາມຈຳເປັນໃນການຜະ ລິດ ສິນຄ້າ ຢູ່ໃນລະບອບສັງຄົມ ນິ ຍົມ. ຢູ່ໃນລະບອບສັງຄົມນິຍົມ ການແບ່ງງານຢູ່ໃນສັງຄົມຍັງຄົງຮັກສາໄວ້ຢູ່ ແລະ ກໍ່ນັບມື້ນັບເລິກເຊິ່ງ ກວ່າ ເກົ່າ ແລະ ໃນຕົວແລ້ວ ມັນກໍ່ພັດແມ່ນປະຖົມປັດໄຈ ທາງດ້ານວັດຖຂອງການ ຜະລິດສິນຄ້າ. ສາຍເຫດທີ່ພາໃຫ້ມີການຜະລິດສິນຄ້າ ຢູ່ໃນລະບອບສັງຄົມນິ-ຍົມ ນັ້ນກໍ່ນອນຢູ່ໃນຈຸດພິເສດຂອງການພົວພັນກ່ຽວກັບກຳມະສິດລວມຫມູ່ແບບ ສັງຄົມນິຍົມ ແລະ ຂອງລັກສະນະການອອກແຮງງານ. ກຳມະສິດລວມ ຫມູ່ ແບບສັງຄົມນິຍົມ ມີຢູ່ພາຍໃຕ້ສອງຮູບການຄື: ຮູບການເປັນກຳມະສິດຂອງລັດ (ຂອງທົ່ວປວງຊົນ) ແລະ ຮູບການເປັນກຳມະສິດຂອງສະຫະກອນ.

ພາຍໃຕ້ລະບອບສັງຄົມນິຍົມ ການອອກແຮງງານຍັງຄົງຮັກສາລັກສະນະບໍ່ ເປັນເນື້ອດຽວກັນໃນລະດັບໃດລະດັບຫນຶ່ງ ທາງດ້ານສັງຄົມ-ເສດຖະກິດ. ມີ ຄວາມແຕກຕ່າງກັນຢ່າງຫລວງຫລາຍ ລະຫວ່າງການອອກແຮງງານ ດ້ວຍມັນ ສະຫມອງ ກັບການອອກແຮງງານ ດ້ວຍຮ່າງກາຍ ແລະ ກໍ່ມີຄວາມແຕກຕ່າງ

ກັນລະຫວ່າງການອອກແຮງງານ ແບບມີລະດັບວິຊາສະເພາະ ກັບການ ອອກ
ແຮງງານແບບບໍ່ມີລະດັບວິຊາສະເພາະ, ກໍ່ລະຫວ່າງການອອກແຮງງານ -
ຂອງກຳມະກອນກັບການອອກແຮງງານ ຂອ່ງຊາວນາລວມໝູ່ ສະມາຊິກນາ
ລວມ. ຈາກນີ້ ມັນກໍ່ບໍ່ອາດສາມາດຈະລວບລວມເອົາໝົດທຸກຮູບແບບ ການ
ອອກແຮງງານເຂົ້າມາເປັນຮູບແບບເອກະພາບອັນດຽວໂດຍກົງໄດ້ໂລດ. ເຮັດ
ການລວບລວມແມ່ນໄດ້ ກໍ່ແຕ່ແບບທາງອ້ອມຜ່ານຄຸນຄ່າເທົ່ານັ້ນ. ພາຍໃຕ
ລະບອບສັງຄົມນິຍົມ ການອອກແຮງງານຍັງບໍ່ທັນໄດ້ກາຍມາເປັນຄວາມ ຮຽກ
ຮ້ອງຕ້ອງການອັນເປັນຕາຍອັນດັບໜຶ່ງເທື່ອ ແລະ ມັນກໍ່ຍັງຕ້ອງການໃຫ້ ມີ
ການຊຸກຍູ້ສົ່ງເສີມທາງດ້ານວັດຖຸຢູ່. ສ່ວນວ່າວຽກງານ ບວກໃສ່ ສາຍເຫດ
ອັນອື່ນໆອີກ ໄດ້ເຮັດໃຫ້ການພົວພັນສິນຄ້າ-ເງິນຍັງຮັກສາໄວ້ຢູ່ໃນລະບອບ-
ສັງຄົມນິຍົມ.

ຢູ່ໃນການກໍ່ສ້າງສັງຄົມນິຍົມ ມັນມີຄວາມຈຳເປັນທີ່ຈະຕ້ອງນຳໃຊ້ການພົວ
ພັນສິນຄ້າ-ເງິນ ໃຫ້ໝົດຄຸນປະໂຫຍດຂອງມັນ ໂດຍສອດຄ່ອງກັບເນື້ອໃນອັນ
ໃໝ່ຂອງມັນ ຢູ່ໃນລະບອບສັງຄົມນິຍົມ. ການພົວພັນສິນຄ້າ-ເງິນ ມີເນື້ອໃນ
ອັນໃໝ່ຢູ່ໃນລະບອບສັງຄົມນິຍົມ ກໍ່ຍອມວ່າ ມັນແມ່ນຜູ້ຜະລິດສັງຄົມນິຍົມ ທີ່
ທອນໂຮມກັນ (ລັດ, ສະຫະກອນ)ທີ່ເປັນຜູ້ ດຳເນີນການຜະລິດສິນຄ້າ ແບບ
ສັງຄົມນິຍົມ ບົນພື້ນຖານກຳມະສິດສ່ວນລວມແບບສັງຄົມນິຍົມ ກ່ຽວກັບ ພາຫະ
ນະການຜະລິດ ແລະ ການຜະລິດອັນນີ້ ກໍ່ແມ່ນດຳເນີນໄປຢ່າງມີແຜນການ .
ຍ້ອນມີຈຸດພິເສດດ໋ແນ່ນີ້ ການຜະລິດສິນຄ້ານຳຢູ່ໃນລະບອບສັງຄົມນິຍົມ ຈຶ່ງບໍ່ສາ
ມາດຈະຫັນປ່ຽນມາເປັນການຜະລິດສິນຄ້າແບບທຶນນິຍົມໄດ້.

ຢູ່ໃນລະບອບສັງຄົມນິຍົມ ການຜະລິດສິນຄ້າບໍ່ມີລັກສະນະແບບກອນລວມຄື
ກັນກັບຢູ່ໃນລະບອບທຶນນິຍົມ. ຢູ່ໃນລະບອບສັງຄົມນິຍົມຂົງເຂດການເຄື່ອນ -
ໄຫວຂອງການຜະລິດສິນຄ້າ ແລະ ຂອງການຈຳລະຈອນສິນຄ້າ ແມ່ນມີຈຳ
ກັດ. ຕົວຢ່າງ, ແຮງງານບໍ່ເປັນສິນຄ້າ, ມັນບໍ່ມີການຊື້ ແລະ ການ ຂາຍ
ແຮງງານນຳກັນ. ດິນຄອນພ້ອມທັງພື້ນດິນ ໄດ້ຖືກຖອນອອກຈາກຮອບ ໝຸນ
ວຽນຂອງການຄ້າ ໝາຍຄວາມວ່າ ດິນຄອນບໍ່ອາດຈະເປັນເປົ້າໝາຍ ຂອງ
ການຊື້ຂາຍໄດ້. ວິສາຫະກິດສັງຄົມນິຍົມ ພ້ອມທັງ ທຶນພື້ນຖານຂອງມັນ -
(ເຄື່ອງຈັກ, ເຄຫະສະຖານຕ່າງໆ, ອຸປະກອນ ແລະ ອື່ນໆ) ແມ່ນຊື້ແລະ

ຂາຍກັນບໍ່ໄດ້.

ການທີ່ທາດແທ້ຂອງການຜະລິດສິນຄ້າໄດ້ມີການປ່ຽນແປງຢ່າງເຖິງ ກົກ ເຖິງຮາກ ຢູ່ໃນລະບອບສັງຄົມນິຍົມນັ້ນ ໄດ້ຮັດໃຫ້ພາກສ່ວນປະກອບອື່ນໆ ຢູ່ ໃນການຜະລິດສິນຄ້າ ມີການປ່ຽນແປງເຊັ່ນດຽວກັນ. ພາກສ່ວນປະກອບຫຼາຍ ອັນເຊັ່ນ: ສິນຄ້າແຮງຄົນ ຄຸນຄ່າສ່ວນເກີນ ແລະ ອື່ນໆ ທີ່ສອງແສງເຖິງລັກ ສະນະທົ່ວນິຍົມຂອງການຜະລິດສິນຄ້າໃນເມື່ອກ່ອນນັ້ນ ມາບາດນີ້ ກໍ່ໄດ້ ສູນ ຫາຍໄປແລ້ວ. ພາກສ່ວນປະກອບເສດຖະກິດອັນອື່ນໆ ຢູ່ໃນການຜະລິດສິນຄ້າ ເຊັ່ນ: ສິນຄ້າ, ເງິນ, ຄຸນຄ່າ, ລາຄາ, ກຳໄລ, ສິນເຊື່ອ ຍັງຄົງຮັກ-ສາໄວ້ຢູ່ແຕ່ທາດແທ້ຂອງມັນໄດ້ມີການປ່ຽນແປງຢ່າງຫລວງຫລາຍ.

ຢູ່ໃນສັງຄົມ ສັງຄົມນິຍົມ ການພົວພັນສິນຄ້າ-ເງິນ ແມ່ນເກີດມີຂຶ້ນ:ອັນ ທີໜຶ່ງ, ລະຫວ່າງພາກສ່ວນເສດຖະກິດຂອງລັດ ກັບພາກສ່ວນ ເສດຖະກິດ ຂອງລວມໝູ່ເປັນສະຫະກອນ ຊຶ່ງຢູ່ໃນນີ້ ຕົ້ນຕໍກໍ່ແມ່ນສະຫະກອນການຜະລິດ-ກະສິກຳ ແລະ ນາລວມ. ຊຸດສາຫະກຳຂອງລັດແມ່ນຜະລິດສິນຄ້າ ທີ່ຕອບສະ ໜອງຄວາມຮຽກຮ້ອງຕ້ອງການ ທາງດ້ານພາຫະນະການຜະລິດ ຂອງ ພາກ ສ່ວນເສດຖະກິດຂອງລວມໝູ່ ແລະ ທາງຕອບສະໜອງຄວາມຮຽກຮ້ອງ ຕ້ອງ ການສ່ວນຕົວໃຜລາວ ຂອງສະມາຊິກຢູ່ໃນວິສາຫະກິດແບບສະຫະກອນ. ສະ ຫະພັນແບບສະຫະກອນ ແມ່ນຜະລິດສິນຄ້າທີ່ຕອບສະໜອງຄວາມຮຽກຮ້ອງ - ຕ້ອງການ ຂອງຊຸດສາຫະກຳ ທາງດ້ານວັດຖຸດິບ ແລະ ຄວາມຮຽກຮ້ອງຕ້ອງ ການຂອງປະຊາຊົນພົນລະເມືອງ ທາງດ້ານສະບຽງອາຫານ ແລະ ເຄື່ອງໃຊ້ ສອຍອື່ນໆອີກຈຳນວນໜຶ່ງ.

ການແລກປ່ຽນສິນຄ້າ ແມ່ນຮູບການພົວພັນທາງດ້ານເສດຖະກິດອັນ ຈຳ ເປັນ ລະຫວ່າງຊຸດສາຫະກຳຂອງລັດ ກັບການກະສິກຳທີ່ໄດ້ມີການຫັນປ່ຽນມາ ເປັນສະຫະກອນລວມໝູ ;

- ອັນທີສອງ, ການຜະລິດສິນຄ້າ ແລະ ການຈໍລະຈອນແມ່ນກວມເອົາ ໝົດ ພວງພະນັ້ງເຄື່ອງໃຊ້ສອຍຊຶ່ງຜະລິດອອກມາ ຢູ່ໃນພາກສ່ວນເສດຖະກິດ ຂອງ ລັດ ແລະ ຂອງລວມໝູ່ເປັນສະຫະກອນ ກໍ່ແມ່ນສະມາຊິກນາລວມເປັນຜູ້ຜະ ລິດອອກມາ ຢູ່ໃນເສດຖະກິດສຳຮອງແບບສ່ວນຕົວ ຂອງພວກເຂົາເຈົ້າ;ຜ່ານ ລະບົບການຊື້ຂາຍ ເຄື່ອງໃຊ້ສອຍທັງໝົດເຫລົ່ານີ້ ກໍ່ລວມແຕ່ໄດ້ກາຍມາເປັນ

ກຳມະສິດສ່ວນຕົວໃຜລາວ ຂອງປະຊາຊົນ ພົນລະເມືອງຢູ່ໃນຕົວເມືອງ ແລະ ຊົນນະບົດ;
-ອັນທີສາມ, ຢູ່ພາຍໃນພາກສ່ວນເສດຖະກິດຂອງລັດ ການພົວພັນສິນຄ້າແມ່ນ ເກີດມີຂຶ້ນໃນຂົງເຂດການຜະລິດພາຫະນະການຜະລິດ. ຜ່ານການຊື້ຂາຍ ລະ ຫວ່າງວິສາຫະກິດນຳກັນ ມັນມີການຈຳລະຈອນພາຫະນະການຜະລິດ ທີ່ຜະລິດ-ຂຶ້ນມາຢູ່ໃນວິສາຫະກິດຂອງລັດ (ແມ່ຈັກ, ເຄື່ອງຈັກ, ໂລຫະ, ຖ່ານຫີນ , ນ້ຳມັນ, ຊີມັງ ແລະ ອື່ນໆ) ແລະ ພາຫະນະການຜະລິດອັນນີ້ ກໍແມ່ນ ເປັນ ສິນຄ້າ;
- ໃນທີ່ສຸດ, ການພົວພັນສິນຄ້າກໍ່ແມ່ນເກີດມີຂຶ້ນ ລະຫວ່າງລັດສັງຄົມນິຍົມກັບ ປະເທດອື່ນໆ ຢູ່ໃນຮອບໝຸນວຽນການຄ້າຕ່າງປະເທດ.

ການຜະລິດສິນຄ້າ ແມນຮັບໃຊ້ສັງຄົມ ສັງຄົມນິຍົມ ແລະ ກໍ່ສ້າງເງື່ອນ-ໄຂໃຫ້ກຳລັງການຜະລິດຂອງສັງຄົມ ມີການຂະຫຍາຍຕົວ. ເມື່ອໃດຫາກມີການ ກ້າວຂຶ້ນໄປສູ່ກຳມະສິດເອກະພາບອັນດຽວ ຂອງທ່ວປວງຊົນ ແບບກອມມູ ນິດ ແລະ ລະບອບການແຈກຢາຍແບບກອມມູນິດແລ້ວ ເມື່ອນັ້ນ ການພົວພັນສິນຄ້າ -ເງິນ ກໍ່ຈະໝົດຄວາມໝາຍ ທາງດ້ານເສດຖະກິດ ແລະ ກໍ່ຈະຕາຍໄປ.

ມູນຄ່າໃຊ້ສອຍ ແລະມູນຄ່າ ຂອງ ສິນຄ້າ

ຄັ້ງພວກເຮົາຮູ້ນຳກັນມາແລ້ວນັ້ນ ສິນ-ຄ້າ ແມ່ນ ມີສອງເບື້ອງ ແລະ ມີສອງ-ຄຸນລັກສະນະ-ນັ້ນມີ ມູນຄ່າໃຊ້ສອຍ ແລະ ມີມູນຄ່າ. ຄວາມໝາຍຂອງຄຸນລັກສະນະທັ້ງສອງອັນນີ້ ຂອງສິນຄ້າ ຢູ່ໃນ ລະບອບສັງຄົມນິຍົມ ແມ່ນຕ່າງກັນຢ່າງຮາດຂັ້ນ ກັບຄຸນລັກສະນະຂອງສິນຄ້າຢູ່ ໃນສະພາບເງື່ອນໄຂຂອງທຶນນິຍົມ.

ນາຍທຶນມີຄວາມສົນໃຈນຳມູນຄ່າຂອງສິນຄ້າ ໃນຖານະທີ່ມັນເປັນພົນຖານ ເພື່ອກອບໂກຍເອົາຄຸນຄ່າສ່ວນເກີນ. ນາຍທຶນມີການຜະລິດຄຸນຄ່າໃຊ້ສອຍ ກໍ ຍ້ອນວ່າ ຢູ່ໃນກະໂຕຂອງມັນແລ້ວ ມັນກໍ່ເປັນຕົວແທນໃຫ້ແກ່ຄຸນຄ່າສ່ວນເກີນ.

ພາຍໃຕ້ລະບອບສັງຄົມນິຍົມ ຜ່ານຂະບວນວັດແຫ່ງການຊຸ້ນຳການຜະລິດ ຢ່າງມີແຜນການນັ້ນ ລັດແມ່ນຄຳນຶງເຖິງທັງສອງເບື້ອງ ຂອງສິນຄ້າຄຸນຄ່າ-ໃຊ້ສອຍ ແລະ ມູນຄ່າ.

ຢູ່ໃນເສດຖະກິດສັງຄົມນິຍົມ ຄຸນຄ່າໃຊ້ສອຍຂອງສິນຄ້າ ມີຄວາມຫມາຍ ສຳຄັນເປັນພິເສດ. ສັງຄົມ ສັງຄົມນິຍົມ ມີຄວາມສົນໃຈໃນການເພີ່ມທະວີຈຳ ນວນຄຸນຄ່າໃຊ້ສອຍ ແລະ ໃນການປັບປຸງຄຸນນະພາບຂອງມັນໃຫ້ດີກວ່າເກົ່າ. ພາຍໃຕ້ລະບອບສັງຄົມນິຍົມ ສັງຄົມບໍ່ສະເພາະພຽງແຕ່ຂໍ້ນແຜນການກ່ຽວ ກັບ ຈຳນວນ ແລະ ຈຸະນິດຂອງຄຸນຄ່າໃຊ້ສອຍເທົ່ານັ້ນ ແຕ່ມັນພັດຍັງດຳເນີນການ ຕໍ່ສູ້ເພື່ອເພີ່ມທະວີຄຸນນະພາບ ຂອງສິນຄ້າ ທີ່ຜະລິດອອກມານັ້ນ ໃຫ້ສູງຂໍ້ນ - ກວ່າເກົ່າອີກ.

ມູນຄ່າຂອງສິນຄ້າ ຍັງມີຄວາມຫມາຍຢ່າງຫລວງຫລາຍ ສຳລັບສັງຄົມສັງ ຄົມນິຍົມ. ມີການຂໍ້ນແຜນການການຜະລິດບໍ່ສະເພາະພຽງແຕ່ເປັນຕົວ ເລກ ຄາດຫມາຍ ເປັນວັດຖຸເທົ່ານັ້ນ ແຕ່ກໍ່ຍັງເປັນຕົວເລກຄາດຫມາຍເປັນເງິນ - (ເປັນມູນຄ່າ)ອີກ. ມີການໃຊ້ຕົວເລກຄາດຫມາຍດັ່ງກ່າວນີ້ ເພື່ອເຮັດແນວ ໃດໃຫ້ມີການຫລຸດຜ່ອນມູນຄ່າຂອງສິນຄ້າລົງຢ່າງເປັນລະບົບ, ຮັບປະກັນໃຫ້ມີ ການເຕີບໃຫຍ່ຂະຫຍາຍຕົວຢ່າງເນື່ອງນິດລຽນຕິດ ຂອງການສະສົມສັງຄົມນິ- ຍົມ ແລະ ຕອບສະຫນອງໃຫ້ໄດ້ຢ່າງເຕັມສ່ວນກວ່າເກົ່າ ຄວາມຮຽກຮ້ອງ - ຕ້ອງການຂອງຄົນຢູ່ໃນສັງຄົມ ສັງຄົມນິຍົມ.

ບໍ່ມີຂໍ້ຂັດແຢ່ງແບບເປັນປໍລະປັກກັນລະຫວ່າງຄຸນຄ່າໃຊ້ສອຍ ກັບມູນຄ່າ ຢູ່ ໃນສັງຄົມ ສັງຄົມນິຍົມ ຍ້ອນວ່າມັນກໍ່ບໍ່ມີການຂັດແຢ່ງກັນລະຫວ່າງການອອກ- ແຮງງານ ຂອງສ່ວນຕົວ ກັບການອອກແຮງງານຂອງສັງຄົມ. ແຕ່ເວົ້າແນວນີ້ ກໍ່ບໍ່ຫມາຍຄວາມວ່າ ພາຍໃຕ້ລະບອບສັງຄົມນິຍົມ ບໍ່ມີຂໍ້ຂັດແຢ່ງກັນຈັກດີ້ ເລີຍ ລະຫວ່າງຄຸນຄ່າໃຊ້ສອຍ ກັບມູນຄ່າ ຂອງສິນຄ້າ. ຂໍ້ຂັດແຢ່ງອັນນີ້ ແມ່ນມີ ຢູ່ ແຕ່ມັນບໍ່ແມ່ນຂໍ້ຂັດແຢ່ງແບບເປັນປໍລະປັກກັນຄືກັນກັບຢູ່ໃນເງື່ອນໄຂຂອງທຶນນິ- ຍົມ ແລະ ມັນກໍ່ບໍ່ມີລັກສະນະມ້າງເພທຳລາຍ. ເປັນຕົ້ນຕົວຢ່າງທີ່ສ່ອງແສງ- ເຖິງປະກົດການຂອງການຂັດແຢ່ງກັນຄືແນວນີ້ ກໍ່ແມ່ນຢູ່ບ່ອນທີ່ວ່າ ເມື່ອ ໃດ ຫາກຄຸນນະພາບຂອງສິນຄ້າບໍ່ສູງ ພຽງພໍແລ້ວ ໃນເວລານັ້ນມັນກໍ່ເກີດມີຄວາມ ຫຍຸ້ງຍາກໃນການຈຳຫນ່າຍສິນຄ້າ ດັ່ງກ່າວນີ້. ເປັນບາງຄັ້ງບາງຄາວ ສິນ ຄ້າທີ່ຜະລິດອອກມານັ້ນແມ່ນຈຳຫນ່າຍອອກທັງນີ້ກໍ່ບໍ່ແມ່ນຍ້ອນວ່າ ບໍ່ຕ້ອງ ການ ສິນຄ້າດັ່ງກ່າວນີ້ເລີຍ ແຕ່ມັນກໍ່ແມ່ນຍ້ອນວ່າ ມູນຄ່າອັນສູງຂອງສິນຄ້າດັ່ງກ່າວ ນີ້ ບໍ່ສອດຄ່ອງກັບຄຸນນະພາບຂອງມັນ. ຍ້ອນແນວນີ້ ຈຶ່ງບໍ່ມີຄວາມຕ້ອງ ການ

ໃນສິນຄ້າດັ່ງກ່າວນີ້. ມູນຄ່າຂອງສິນຄ້າດັ່ງກ່າວນີ້ ຈຳຫນ່າຍບໍ່ອອກ ເພາະ ວ່າຄຸນຄ່າໃຊ້ສອຍຂອງມັນ ບໍ່ອາດຈະຈຳຫນ່າຍອອກໄດ້ ແລະ ໃນກໍລະນີ ດັ່ງ ກ່າວນີ້ ເພີ່ນກໍ່ມີການຫລຸດລາຄາສິນຄ້ານີ້ລົງ.

ຢູ່ໃນສະພາບເງື່ອນໄຂຂອງເສດຖະກິດສັງຄົມນິຍົມ ຂໍ້ຂັດແຍ່ງລະ ຫວ່າງ ຄຸນຄ່າໃຊ້ສອຍກັບມູນຄ່າ ແມ່ນມີການແກ້ໄຂຜ່ານການຊີ້ນຳເສດຖະກິດຢ່າງ ມີ ແຜນການ ແລະ ດ້ວຍວິທີການປັບປຸງການຜະລິດໃຫ້ມີເປັນຫລາຍຊະນິດ ແລະ ມີຄຸນນະພາບດີກວ່າເກົ່າ, ກໍ່ຄືດ້ວຍວິທີການຫລຸດຜ່ອນມູນຄ່າຂອງມັນ.

ເປັນທີ່ຮູ້ນຳກັນແລ້ວວ່າ ລັກສະນະມີສອງດ້ານຂອງສິນຄ້າ ແມ່ນກຳນົດ - ອອກມາຈາກລັກສະນະມີສອງດ້ານຂອງແຮງງານ ທີ່ຜະລິດສິນຄ້າ.

ການໃຊ້ແຮງງານ ເຂົ້າໃນການຜະລິດສິນຄ້ານັ້ນ ເປັນທັງການອອກແຮງ ງານນາມມະທຳ ແລະ ກໍ່ເປັນທັງການອອກແຮງງານຮູບປະທຳ. ພາຍໃຕ້ລະ ບອບສັງຄົມນິຍົມ ການອອກແຮງງານນາມມະທຳ ແລະ ແຮງງານຮູບປະທຳ- ນັ້ນ ແມ່ນສອງເບື້ອງຂອງການອອກແຮງງານຂອງສັງຄົມໂດຍກົງ.

ຢູ່ໃນສັງຄົມທຶນນິຍົມ ລັກສະນະມີສອງດ້ານຂອງການອອກແຮງງານ ແມ່ນ ສ່ອງແສງເຖິງຂໍ້ຂັດແຍ່ງແບບເປັນປໍລະປັກກັນ ທີ່ມີຢູ່ໃນການຜະລິດສິນຄ້ານັ້ນກໍ່ ຄືຂໍ້ຂັດແຍ່ງລະຫວ່າງການອອກແຮງງານຂອງສັງຄົມ ກັບການອອກແຮງ ງານ ຂອງສ່ວນຕົວ.

ຢູ່ໃນສັງຄົມ ສັງຄົມນິຍົມມັນພັດເປັນໄປແນວໃຫມ່ຢ່າງຂາດຂັ້ນ. ຍ້ອນວ່າ ມັນແມ່ນກຳມະສິດສ່ວນລວມ ທີ່ປະກອບເປັນພື້ນຖານເສດຖະກິດ ຂອງລະບົບ ເສດຖະກິດສັງຄົມນິຍົມ ແລະ ລະບອບການອອກແຮງງານແບບຮັບຈ້າງ ກໍ່ໄດ້ ຖືກລົບລ້າງບໍ່ໃຫ້ມີແລ້ວ ດັ່ງນັ້ນຢູ່ໃນສັງຄົມສັງຄົມນິຍົມ ຂໍ້ຂັດແຍ່ງລະຫວ່າງລັກ ສະນະເປັນຂອງສັງຄົມກັບລັກສະນະເປັນຂອງສ່ວນຕົວ ຂອງການອອກແຮງ - ງານ ຈົ່ງສູນຫາຍໄປ. ພາຍໃຕ້ລະບອບສັງຄົມນິຍົມ ການອອກແຮງງານ ບໍ່ ແມ່ນເປັນຂອງສ່ວນຕົວ ແຕ່ມັນພັດເປັນການອອກແຮງງານຂອງສັງຄົມ ໂດຍ ກົງ. ການອອກແຮງງານຂອງຄົນຢູ່ໃນສັງຄົມ ສັງຄົມນິຍົມ ແມ່ນການເຄື່ອນ- ໄຫວທີ່ມີການຈັດຕັ້ງຢ່າງມີແຜນການ ຢູ່ໃນຂອບເຂດ ຂອງຫມົດທົ່ວປະເທດ. ເນື່ອງຈາກວ່າ ລັກສະນະການອອກແຮງງານສັງຄົມນິຍົມໄດ້ມີການປ່ຽນແປງຄື ແນວນີ້ ຜ່ານຂະບວນວິວັດແຫ່ງການຜະລິດຢູ່ໂຮງຈັກໂຮງງານ, ນາລວມ, ນິ

ຄົມຂອງລັດ ແລະ ອື່ນໆ ການອອກແຮງງານຂອງສະເພາະບຸກຄົນ ຈົ່ງມີ ບົດ ບາດເປັນຄືການອອກແຮງງານຂອງສັງຄົມໂດຍກົງ. ສະຫລຸບແລ້ວ ພາຍ ໃຕ້ ລະບອບສັງຄົມນິຍົມ ແມ່ນບໍ່ມີຂໍ້ຂັດແຍ່ງແບບເປັນປໍລະປັກກັນ ລະຫວ່າງ ການ ອອກແຮງງານຮູບປະທຳ ກັບການອອກແຮງງານນາມມະທຳ.

ແຕ່ຍ້ອນວ່າ ການອອກແຮງ່ງານຂອງສັງຄົມ ໂດຍກົງຍັງບໍ່ທັນມີການ ຂະ ຫຍາຍຕົວຢູ່ໃນລະດັບສູງຢ່າງພຽງພໍເທື່ອ ດັ່ງນັ້ນຢູ່ໃນໄລຍະສັງຄົມນິຍົມ ກໍ່ຍັງ ຄົງມີຄວາມຈຳເປັນທີ່ຈະຕ້ອງໄດປະກົດຕົວອອກມາແບບທາງອ້ອມໂດຍໃຊ້ ຄຸນ ຄ່າ ແລະ ຮູບການຕ່າງໆຂອງຄຸນຄ່າ.

ບໍລິມາດມູນຄ່າຂອງສິນຄ້າ <u>ພາຍໃຕ້ລະບອບສັງຄົມນິຍົມ</u> <u>ບໍລິມາດ</u> <u>ມູນ ຄ່າຂອງສິນຄ້າ</u> <u>ແມ່ນກຳນົດອອກມາຈາກ-ຈຳນວນເວລາອອກແຮງງານ</u> <u>ທີ່ຈຳເປັນທາງສັງຄົມ</u> <u>ຊຶ່ງໃຊ້ເຂົ້າໃນການ</u> <u>ຜະ ລິດສິນຄ້າດັ່ງກ່າວ.</u> ເວລາອອກແຮງງານທີ່ຈຳເປັນທາງສັງຄົມນັ້ນ ແມ່ນ - ຫມາຍເຖິງເວລາອອກແຮງງານຜ້ານກາງ ຂອງພວກວິສາຫະກິດທີ່ ດຳເນີນ ການຜະລິດພາກສ່ວນຕົ້ນຕໍຂອງສິນຄ້າ ຢູ່ໃນຂະແຫນງການດັ່ງກ່າວນີ້. ມັນ ມີ ການຜະລິດພາກສ່ວນຕົ້ນຕໍຂອງສິນຄ້າ ຢູ່ໃນສະພາບເງື່ອນໄຂການຜະລິດຜ້ານ ກາງ.

ເວລາທີ່ໃຊ້ໃນຕົວຈິງເຂົ້າໃນການຜະລິດຫົວຫນ່ວຍສິນຄ້າຢູ່ຕາມວິສາຫະ-ກິດໃດຫນຶ່ງຕ່າງຫາກນັ້ນ ແມ່ນເວລາອອກແຮງງານຂອງສະເພາະໃຜລາວ.

ພາຍໃຕ້ລະບອບທຶນນິຍົມ ເວລາອອກແຮງງານທີ່ຈຳເປັນທາງສັງຄົມແມ່ນ ວາງກັນແບບມີຢູ່ໃນຕະຫລາດ. ໂດຍອີງໃສ່ເງື່ອນໄຂພາວະວິໄສ ທາງ ດ້ານ ເສດຖະກິດແລ້ວ ຢູ່ໃນເສດຖະກິດສັງຄົມນິຍົມ ແມ່ນລັດທີ່ເປັນຜູ້ຂຶ້ນ ແຜນການ ກ່ຽວກັບການເຕີບໃຫຍ່ຂະຫຍາຍຕົວ ຂອງສະມັດຖະພາບຂອງການອອກແຮງ-ງານ, ເປັນຜູ້ວາງມາດຕະຖານການໃຊ້ຈ່າຍແຮງງານ ແລະ ເຮັດຄືແນວ ນີ້ ລັດກໍ່ແມ່ນມີການກະທົບໃສ່ຈຳນວນເວລາອອກແຮງງານ ທີ່ຈຳເປັນທາງສັງຄົມ ໂດຍມີການພະຍາຍາມເຮັດໃຫ້ມັນຫລຸດຜ່ອນລົງ.

ເພື່ອຢາກຫລຸດຜ່ອນມູນຄ່າສິນຄ້າລົງ ມັນຕ້ອງຫລຸດຜ່ອນການໃຊ້ຈ່າຍແຮງ ງານເຂົ້າໃນການຜະລິດສິນຄ້າດັ່ງກ່າວ. ເຮັດແນວໃດຈົ່ງຈະສາມາດຫລຸດ -

ຜ່ອນການໃຊ້ຈ່າຍແຮງງານເຂົ້າໃນການຜະລິດສິນຄ້າໄດ້ ?

ສະມັດຖະພາບຂອງການອອກແຮງງານ ມີຜົນສະທ້ອນຕໍ່ບໍລິມາດມູນຄ່າສິນຄ້າ. ສະມັດຖະພາບຂອງການອອກແຮງງານຍິ່ງສູງເທົ່າໃດ ມູນຄ່າຂອງ ຫົວໜ່ວຍສິນຄ້າກໍ່ຍິ່ງຕ່ຳລົງເທົ່ານັ້ນ. ຍ້ອນແນວນັ້ ການຕໍ່ສູ້ເພື່ອຮັດໃຫ້ສະມັດ-ຖະພາບຂອງການອອກແຮງງານເຕີບໃຫຍ່ຂະຫຍາຍຕົວນັ້ນ ຈຶ່ງເປັນການ ຕໍ່ສູ້ເພື່ອຫລຸດຜ່ອນມູນຄ່າຂອງສິນຄ້າ.

ການໃຊ້ຈ່າຍພັດສະດຸ, ວັດຖຸດິບ ແລະ ອື່ນໆກໍ່ມີຜົນສະທ້ອນເຊັ່ນດຽວກັນ ຕໍ່ບໍລິມາດມູນຄ່າສິນຄ້າ, ຢູ່ໃນມູນຄ່າສິນຄ້າ ປະກອບມີການໃຊ້ຈ່າຍແຮງ ງານ "ເປັນ" ແລະງານເປັນວັດຖຸ. ແຮງງານເປັນວັດຖຸແມ່ນແຮງງານໃນທີ່ຜ່ານ-ມາ ທີ່ໃຊ້ເຂົ້າໃນພັດສະດຸ, ວັດຖຸດິບ, ແມ່ຈັກ, ຕຶກ ແລະ ອື່ນໆ. ຍ້ອນແນວ ນັ້ ເພື່ອຢາກຫລຸດຜ່ອນມູນຄ່າສິນຄ້າລົງ ມັນມີຄວາມຈຳເປັນທີ່ຈະຕ້ອງໄດ້ ປະ ຢັດທັງແຮງງານ "ເປັນ" ແລະກໍ່ທັງແຮງງານເປັນວັດຖຸ.

ຢູ່ໃນເສດຖະກິດສັງຄົມນິຍົມ ບາງມາດຕະການເຊັ່ນ ການເຜີຍແຜ່ ຢ່າງ ໄວວາ ແລະ ການນຳໃຊ້ເຂົ້າໃນຕົວຈິງວິທີການອັນກ້າວໜ້າ ໃນການອອກ ແຮງງານ ແລະ ໃນການຜະລິດ, ການເຜີຍແຜ່ຜົນສຳເລັດທາງດ້ານເຕັກນິກ ນັ້ນ ລວມເຖິງຜົນສະທ້ອນຢ່າງໃຫຍ່ຫລວງເພື່ອຮັດໃຫ້ມີການຫລຸດຜ່ອນເວລາ ອອກແຮງງານ ທີ່ຈຳເປັນທາງສັງຄົມ ຊຶ່ງໃຊ້ເຂົ້າໃນການຜະລິດຫົວໜ່ວຍສິນ ຄ້າ. ການແລກປ່ຽນປົດຮຽນນຳກັນ, ຊ່ວຍເຫລືອສະພາບການເຕັກນິກ ແລະ ການຈ່ວຍເຫລືອຊຶ່ງກັນ ແລະ ກັນລະຫວ່າງຊາວຜູ້ອອກແຮງງານຢູ່ໃນວິສາຫະ ກິດສັງຄົມນິຍົມທັງໝົດເຫລົ່ານີ້ ລວມແຕ່ສ້າງເງື່ອນໄຂໃຫ້ສາມາດແກ້ດ່ວງເອົາ ວິສາຫະກິດທີ່ຫລ້າຫລັງໃຫ້ຂຶ້ນມາທັນກັນກັບວິສາຫະກິດທີ່ກ້າວໜ້າ.

๔. ເງິນ ແລະ ພາລະໜ້າທີ່ຂອງເງິນ ຢູ່ໃນສັງຄົມ ສັງຄົມນິຍົມ

ທາດແທ້ເນື້ອໃນຂອງເງິນ ຄວາມຈຳເປັນກ່ຽວກັບເງິນຢູ່ໃນລະບອບ ສັງຄົມນິຍົມ ແມ່ນອອກມາຈາກການ ມີ ການຜະລິດສິນຄ້າ ແລະ ມີການຈຳລະຈອມ. ມູນຄ່າຂອງສິນຄ້າທີ່ສ້າງຂຶ້ນ ມາ

ດ້ວຍການອອກແຮງງານຂອງສັງຄົມ ຜ່ານຂະບວນການວິວັດແຫ່ງການ ຜະລິດ ນັ້ນ ແມ່ນປະກົດຕົວອອກມາ ພາຍໃຕ້ຮູບການເປັນເງິນ. ສະຫລຸບຄວາມວ່າ ພາຍໃຕ້ລະບອບສັງຄົມນິຍົມ ທາດແທ້ເນື້ອໃນຂອງເງິນ ແມ່ນຢູ່ບ່ອນວ່າ ມັນ ເປັນສິ່ງທຽບເທົ່າແບບກວມລວມ ຫມາຍຄວາມວ່າມັນເປັນການສະແດງ ອອກ ເຖິງຄຸນຄ່າຂອງສິນຄ້າອື່ນໆທັງຫມົດ.

ແຕ່ໃນຖານະເປັນສິ່ງທຽບເທົ່າແບບກວມລວມກໍຕາມ ເງິນຢູ່ໃນລະບອບ-ສັງຄົມນິຍົມ ກໍມີເນື້ອໃນອັນໃຫມ່ທີ່ສູງກວ່າເກົ່າ. ຖ້າຫາກວ່າຢູ່ໃນລະບອບທຶນ ນິຍົມເງິນມີບົດບາດເປັນເຄື່ອງມືແຫ່ງການຂູດຮີດຄົນດ້ວຍຄົນນຳກັນ ແຕ່ມາ ຢູ່ ໃນສັງຄົມ ສັງຄົມນິຍົມແລ້ວ ເງິນແມ່ນເປັນເຄື່ອງມືເພື່ອຊຸກຍູ້ສົ່ງເສີມການຜະ ລິດສັງຄົມນິຍົມໃຫ້ມີການເຕີບໃຫຍ່ຂະຫຍາຍຕົວ ແລະ ມີການປັບປຸງໃຫ້ ກ້າວ ຫນ້າກວ່າເກົ່າ. ຢູ່ໃນເງື່ອນໄຂຂອງສັງຄົມນິຍົມ ເງິນແມ່ນສ່ອງແສງ ເຖິງ ການພົວພັນແຫ່ງການຜະລິດແບບສັງຄົມນິຍົມ, ມັນບໍ່ສາມາດຈະກາຍໄປ ເປັນ ທຶນໄດ້ ແລະ ກໍ່ຖືກນຳໃຊ້ໃນຖານະເປັນພາຫະນະກວມລວມຂອງວຽກງານບັນ ຊີ ແລະ ກວດກາການຜະລິດ ແລະ ການແຈກຢາຍຜະລິດຕະພັນຂອງສັງຄົມ, ເປັນເຄື່ອງມືທາງເສດຖະກິດຂອງວຽກງານວາງແຜນການກໍ່ສ້າງເສດຖະກິດ-ແຫ່ງຊາດ.

ການທີ່ທາດແທ້ແລະເນື້ອໃນທາງດ້ານສັງຄົມ-ເສດຖະກິດຂອງເງິນໄດ້ມີ-ການປ່ຽນແປງຢ່າງເຖິງຖອງຢູ່ໃນສັງຄົມສັງຄົມນິຍົມນັ້ນ ມັນໄດ້ປະກົດຕົວອອກ ມາຢູ່ໃນການປ່ຽນແປງພາລະຫນ້າທີ່ຂອງເງິນ.

ຫນ້າທີ່ຂອງເງິນ ກ່ອນອື່ນຫມົດເງິນແມ່ນເຮັດພາລະຫນ້າທີ່ເປັນ ຫົວຫນ່ວຍວັດແທກຄຸນຄ່າຂອງສິນຄ້າ. ພາລະ ຫນ້າທີ່ດັ່ງກ່າວນີ້ ສະແດງອອກໃນການນຳໃຊ້ເງິນວັດແທກຄຸນຄ່າຂອງສິນ ຄ້າ ອື່ນໆທັງຫມົດ. ມີສະເພາະແຕ່ສິນຄ້າແນວເປັນເງິນທີ່ມີຄຸນຄ່າເທົ່ານັ້ນ ທີ່ເຮັດ ພາລະຫນ້າທີ່ເປັນຫົວຫນ່ວຍວັດແທກມູນຄ່າໄດ້. ມັນແມ່ນຄຳທີ່ເປັນສິນຄ້າ ປະ ເພດນີ້.

ຄືດັ່ງພວກເຮົາຮູ້ນຳກັນນັ້ນ ເພີ່ນເອີ້ນເອົາມູນຄ່າຂອງສິນຄ້າທີ່ຄິດໄລ່ອອກ ມາເປັນເງິນນັ້ນວ່າເປັນ<u>ລາຄາຂອງສິນຄ້າ</u>. ເງິນໂຊວຽດປະກົດຕົວອອກ ມາ

ພາຍໃຕ້ຮູບການເປັນທະນາບັດ ແລະ ກໍ່ເຮັດຫນ້າທີ່ເປັນຕົວແທນຂອງຄຳ.ຫົວ ຫນ່ວຍເງິນພັ້ນຖານຢູ່ ສ.ສ.ສ.ຊ ແມ່ນເງິນຮຸບ ທີ່ເຮັດຫນ້າທີ່ເປັນມາດຕະ-ຖານລາຄາ. ຫນຶ່ງຮຸບ ເທົ່າກັນກັບ ๑๐๐ ໂກເປັກ. ເງິນຮຸບ ໂຊວຽດມີນຳ້ ຫນັກເປັນຄຳສົດ ๐,ພຜ້ກ๔๑๘ ກະລາມ.

ພາຍໃຕ້ລະບອບສັງຄົມນິຍົມ ພາລະຫນ້າທີ່ຂອງເງິນເປັນຫົວຫນ່ວຍວັດ - ແທກຄຸນຄ່ານັ້ນ ອຳນວຍຄວາມສະດວກໃຫ້ແກ່ການປະຕິບັດການກວດກາອັດຕາ ການອອກແຮງງານ ແລະ ອັດຕາການຊົມໃຊ້. ໃນເວລາຂັ້ນແຜນການລາຄາ ສິນຄ້ານັ້ນລັດແມ່ນນຳໃຊ້ເງິນເພື່ອເຮັດພາລະຫນ້າທີ່ດັ່ງກ່າວນີ້.

ຢູ່ໃນເສດຖະກິດສັງຄົມນິຍົມ ເງິນແມ່ນປະຕິບັດພາລະຫນ້າທີ່ເປັນ <u>ພາຫະ ນະການຫມູນວຽນ.</u> ເງິນແມ່ນຮັບໃຊ້ການຄ້າ, ມັນຖືກນຳໃຊ້ເປັນພາຫະນະ-ການຫມູນວຽນສິນຄ້າຊຶ່ງແມ່ນລັດສັງຄົມນິຍົມເປັນຜູ້ຂັ້ນແຜນການ ແລະ ເປັນຜູ້ ບັງຄັບບັນຊາ.

ພາຍໃຕ້ລະບອບສັງຄົມນິຍົມ ເງິນທັງມີບົດບາດເປັນ <u>ພາຫະນະການ ຊຳ ລະສະສາງ.</u> ພາລະຫນ້າທີ່ດັ່ງກ່າວນີ້ຂອງເງິນ ສະແດງອອກກ່ອນອື່ນຫມົດ ກໍ່ ແມ່ນໃນເວລາຈ່າຍເງິນເດືອນໃຫ້ພວກກຳມະກອນ ແລະ ພາລະກອນກໍ່ຄື ໃນ ເວລາຈ່າຍເງິນໃຫ້ພວກສະມາຊິກນາລວມ ໃນເວລາທົດແທນເງິນກູ້ຢືມ,ເສ່ຍ ສ່ວຍ, ຊຳລະຄ່າການບໍລິການຢູ່ໃນຕົວເມືອງ ແລະ ອື່ນໆ.

ລັດນຳໃຊ້ເງິນເປັນພາຫະນະການຊຳລະສະສາງ ໃນການດຳເນີນ ການ ເຄື່ອນໄຫວ ທາງດ້ານການເງິນ ແລະ ດ້ານສິນເຊື່ອຢູ່ໃນເສດຖະກິດ ແຫ່ງ ຊາດ ແລະ ເພື່ອກວດກາວຽກງານຂອງວິສາຫະກິດສັງຄົມນິຍົມ ທາງດ້ານ - ການເງິນ.

ພາຍໃຕ້ລະບອບສັງຄົມນິຍົມ ເງິນແມ່ນເຮັດພາລະຫນ້າທີ່ເປັນ <u>ປັດໄຈ ການສະສົມສັງຄົມນິຍົມ</u> ແລະ <u>ການປະຢັດສັງຄົມນິຍົມ.</u> ເງິນແມ່ນປະຕິບັດພາ ລະຫນ້າທີ່ດັ່ງກ່າວນີ້ ພາຍໃຕ້ຮູບການມີການຮັກສາ ແລະ ຫມູນໃຊ້ທຶນ ແລະ ລາຍໄດ້ເປັນເງິນຂອງຊາວຜູ້ອອກແຮງງານ ທີ່ເອົາມາຝາກໄວ້ນັ້ນ ກໍ່ຄືຄັງສະ ສົມເປັນເງິນຂອງວິສາຫະກິດສັງຄົມນິຍົມ ແລະ ອົງການຈັດຕັ້ງອື່ນໆອີກ.

ຢູ່ໃນສະພາບເງື່ອນໄຂຂອງສັງຄົມນິຍົມ ການສະສົມເປັນເງິນ ບໍ່ພາໃຫ້-ເກີດມີການຂູດຮີດຄົນດ້ວຍຄົນນຳກັນຄືກັນກັບຢູ່ໃນລະບອບທຶນນິຍົມ.

ຢູ່ໃນສັງຄົມ ສັງຄົມນິຍົມມັນແມ່ນຄຳທີ່ເຮັດພາລະຫນ້າທີ່ເປັນເງິນສາກົນ. ເງິນສາກົນ ເຮັດບົດບາດ ເປັນພາຫະນະການຊຳລະສະສາງ ຂອງສາກົນ, ເປັນພາຫະນະການຊື້ຂາຍທາງສາກົນ ແລະ ເປັນບ່ອນສະສົມ.

ນີ້ຄືພາລະຫນ້າທີ່ຂອງເງິນຢູ່ໃນລະບອບສັງຄົມນິຍົມ. ພາລະຫນ້າທີ່ ຂອງເງິນ ບໍ່ຕັດແຍກອອກຈາກກັນ, ມັນມີຄວາມເປັນເອກະພາບນຳກັນຢ່າງເນື້ອງນິດລຽນຕິດ. ທາດແທ້ເນື້ອໃນຂອງເງິນໃນຖານະເປັນສິ່ງທຽບເທົ່າກວມລວມກໍ່ແມ່ນປະກົດຕົວອອກມາຢູ່ໃນຄວາມເປັນເອກະພາບດັ່ງກ່າວນີ້ແລ້ວ.

ການຫມູນວຽນເງິນພາຍໃຕ້ ລະບອບສັງຄົມນິຍົມ

ເງິນສາມາດເຮັດບົດບາດເປັນສິ່ງ ທຽບເທົ່າກວມລວມໄດ້ ກໍ່ຕໍ່ເມື່ອວ່າ ຈຳນວນ ຂອງມັນແມ່ນສອດຄ່ອງ ກັບຄວາມຮຽກຮ້ອງຕ້ອງການອັນແທ້ຈິງຂອງເສດຖະກິດແຫ່ງຊາດ ໃນພາຫະນະການ ຫມູນວຽນ ແລະ ພາຫະນະການຊຳລະສະສາງ.

ຈຳນວນເງິນທີ່ຈຳເປັນສຳລັບການຫມູນວຽນນັ້ນ ສ່ວນຫລາຍກໍ່ແມ່ນກຳນົດມາຈາກມູນຄ່າລາຄາຂອງສິນຄ້າ ທີ່ພວມຫມູນວຽນຢູ່ນັ້ນ ຫານໃສ່ຄວາມ ໄວ ຂອງຮອບຫມູນວຽນເງິນ.

ການປະຕິບັດຢ່າງເຂັ້ມງວດໃຫ້ມີການສົມສ່ວນກັນຢ່າງຖືກຕ້ອງ ລະຫວ່າງມູນຄ່າລາຄາສິນຄ້າ ກັບຈຳນວນເງິນຢູ່ໃນການຫມູນວຽນ ແມ່ນຫນຶ່ງໃນບັນດາເງື່ອນໄຂອັນສຳຄັນທີ່ຮັບປະກັນເຮັດໃຫຊີວິດທາງດານເສດຖະກິດຢູ່ໃນປະເທດມີການຂະຫຍາຍຕົວໄປຢ່າງປົກກະຕິດີ. ໂດຍອີງໃສ່ກົດເກນວ່າດ້ວຍການຫມູນວຽນເງິນ ລັດດຳເນີນການບັງຄັບບັນຊາການຫມູນວຽນເງິນ ແລະ ນຳໃຊ້ມັນຢ່າງມີແຜນການ ເພື່ອສົດຜົນປະໂຫຍດໃນການເສີມຂະຫຍາຍເສດຖະກິດແຫ່ງຊາດ. ການບັງຄັບບັນຊາການຫມູນວຽນເງິນ ແມ່ນດຳເນີນໄປດ້ວຍວິທີ ການວາງແຜນການການເງິນຂອງລັດ, ແຜນການສິນເຊື່ອ ແລະ ແຜນການ ເງິນສົດ.

ຫນຶ່ງໃນເງື່ອນໄຂອັນສຳຄັນທີ່ມີຜົນສະທ້ອນຕໍ່ການຫມູນວຽນເງິນ ແມ່ນອັດຕາສ່ວນລະຫວ່າງລາຍໄດ້ຂອງປະຊາຊົນພົນລະເມືອງ ດານຫນຶ່ງ ກັບບໍລິມາດການຫມູນວຽນສິນຄ້າ ກໍ່ຄືການບໍລິການແບບເກັບເງິນເພື່ອຮັບໃຊ້ປະຊາຊົນອີກ

ດ້ານໜຶ່ງ. ໂດຍອີງໃສ່ແຜນຖຸມດຽງ ລະຫວ່າງລາຍໄດ້ ແລະລາຍຈ່າຍເປັນ ເງິນຂອງປະຊາຊົນພົນລະເມືອງ ມັນກໍມີການຂົ້ນແຜນການເງິນສົດ ຂອງ ທະນາຄານແຫ່ງລັດຊຶ່ງແມ່ນລັດຖະບານເປັນຜູ້ຮັບຮອງເອົາ.

ແຜນການເງິນສົດຂອງທະນາຄານແຫ່ງລັດ ຊີ້ບອກໃຫ້ເຫັນເຖິງ ລາຍຮັບ ທັງໝົດເປັນເງິນສົດທີ່ຄາດຄະເນວ່າຈະເຂົ້າທະນາຄານແຫ່ງລັດ, ເຊັ່ນ : ລາຍຮັບຂອງບັນດາອົງການຈັດຕັ້ງການຄ້າ (ຫລາຍກວ່າ ๔/๕ ຂອງລາຍຮັບ ທັງໝົດ), ລາຍຮັບຂອງວິສາຫະກິດບໍລິການສາທາລະນະຊົນ, ຂອງການອົມ ສົ່ງ, ການສື່ສານ, ອາກອນ, ເງິນຝາກເຂົ້າຄັງປະຢັດ ແລະ ອື່ນໆ. ໃນ ເວລາດຽວກັນນີ້ ແຜນການເງິນສົດຍັງສ່ອງແສງເຖິງການຈ່າຍເງິນອອກຈາກ ຄັງຂອງທະນາຄານເປັນເງິນເດືອນ, ເປັນການຈ່າຍຄ່າການອອກແຮງ ງານ ຂອງພວກສະມາຊິກນາລອມ ເປັນການຈ່າຍຄ່າເກັບຊີ້ພະລິດຕະພັນນຳພວກ - ຊາວສະຫະກອນ, ການຈ່າຍຄ່າເບຍບຳນານ, ການຈ່າຍເງິນອຸດໜູນແລະ ອື່ນໆ. ອັດຕາສ່ວນລະຫວ່າງລາຍຮັບກັບລາຍຈ່າຍເງິນຕາມແຜນການເງິນສົດ ນັ້ນ ໄດ້ອະນຸຍາດທະນາຄານແຫ່ງລັດ ມີໂອກາດໄດ້ບັງຄັບບັນຊາ ກ້ອນເງິນທີ່ ຢູ່ໃນການໝຸນວຽນ.

ຢູ່ໃນສະພາບເງື່ອນໄຂຂອງລະບອບສັງຄົມນິຍົມ ການຈັດຕັ້ງການ ໝຸນ ວຽນເງິນ ເປັນການປະກອບສ່ວນເຮັດໃຫ້ເງິນມີຄວາມເຂັ້ມແຂງ ແລະ ໝັ້ນ ທຽງ.

ພາຍໃຕ້ລະບອບສັງຄົມນິຍົມ ເງິນຮັບປະກັນໄດ້ມີຄວາມໝັ້ນທ່ຽງ ບໍ່ ສະ ເພາະແຕ່ວ່າຍ້ອນມີຄຳສະສົມໄວ້ເທົ່ານັ້ນ ແຕ່ກອນອື່ນໝົດ ມັນກໍແມ່ນ ຍ້ອນ ສາຍເຫດທີ່ວ່າ ລັດມີສິນຄ້າເປັນຈຳນວນຫລວງຫລາຍ ທີ່ເຂົ້າຮ່ວມໃນ ຮອບ ໝຸນວຽນສິນຄ້າ ໃນລາຄາຄົງທີ່ ແລະ ໝັ້ນທ່ຽງ. ຍ້ອນແນວນີ້ ເງິນຕາໂຊ ວຽດຈຶ່ງແມ່ນເງິນຕາທີ່ໝັ້ນທ່ຽງແຂງແຮງກວ່າໝູ່ໃນໂລກ. ການຜະລິດສັງ ຄົມນິຍົມ ມີການຂະຫຍາຍຕົວຫລາຍເທົ່າໃດ ເງິນຮຸບ ຂອງໂຊວຽດກໍ່ຍິ່ງເຂັ້ມ ແຂງເທົ່ານັ້ນ.

ມ. ກົດເກນຄຸນຄ່າ ຢູ່ໃນເສດຖະກິດສັງຄົມນິຍົມ

ການທີ່ມີການຜະລິດສິນຄ້າຢູ່ໃນລະບອບສັງຄົມນິຍົມນັ້ນຫມາຍຄວາມວ່າ<u>ກົດເກນຄຸນຄ່າ</u> ກໍ່ມີການເຄື່ອນໄຫວຢູ່ໃນເສດຖະກິດສັງຄົມນິຍົມ.

ທາດແທ້ເນື້ອໃນຂອງກົດເກນຄຸນຄ່າ ແມ່ນຢູ່ບ່ອນວ່າ ການຜະລິດ ແລະ ການແລກປ່ຽນສິນຄ້າ ແມ່ນດຳເນີນໄປຢ່າງສອດຄ່ອງກັບຈຳນວນແຮງງານ ທີ່ຈຳເປັນທາງສັງຄົມ ທີ່ປະກອບມີຢູ່ໃນສິນຄ້າດັ່ງກ່າວນັ້ນ.

ກົດເກນຄຸນຄ່າ ໄດ້ເລີ່ມຕົ້ນມີການເຄື່ອນໄຫວພ້ອມດຽວກັນກັບການປະກົດຕົວຂອງການຜະລິດສິນຄ້າ. ການຜະລິດສິນຄ້າມີການຂະຫຍາຍຕົວໄປເທົ່າໃດ ຂົງເຂດການເຄື່ອນໄຫວຂອງກົດເກນຄຸນຄ່າ ກໍ່ຍິ່ງກ້ວາງຂວາງອອກຕື່ມ ເທົ່ານັ້ນ. ຢູ່ໃນເສດຖະກິດທຶນນິຍົມ ກົດເກນຄຸນຄ່າມີບົດບາດບັງຄັບບັນຊາ ການຜະລິດ ແລະ ການແຈກຢາຍທຶນ ແລະ ແຮງງານໄປຕາມຂະແໜງການຕ່າງ ຕ່າງຂອງການຜະລິດ.

ພາຍໃຕ້ລະບອບສັງຄົມນິຍົມ ກົດເກນຄຸນຄ່າ ແມ່ນບໍ່ມີການເຄື່ອນໄຫວ - ຢ່າງເສລີຄືກັນກັບຢູ່ໃນສັງຄົມທຶນນິຍົມ. ຢູ່ໃນເງື່ອນໄຂຂອງສັງຄົມນິຍົມ ຂົງເຂດການເຄື່ອນໄຫວຂອງກົດເກດຄຸນຄ່າ ແມ່ນມີຂັ້ນຈຳກັດ. ສິ່ງດັ່ງກ່າວນີ້ມາຈາກການທີ່ວ່າ ຢູ່ໃນລະບອບສັງຄົມນິຍົມ ແມ່ນກຳມະສິດລວມໝູ່ແບບສັງຄົມນິຍົມ ທີ່ເປັນເຈົ້າຄອບຄອງ ແລະ ເສດຖະກິດກໍ່ແມ່ນດຳເນີນໄປຕາມແຜນການ.

ຢູ່ໃນສັງຄົມ ສັງຄົມນິຍົມ ກົດເກນຄຸນຄ່າບໍ່ໄດ້ບັງຄັບບັນຊາການແຈກຢາຍ ພາຫະນະການຜະລິດ ແລະ ພ້ຳຫະນະການອອກແຮງງານ ລະຫວ່າງຂະ-ແໜງການຕ່າງໆຂອງເສດຖະກິດແຫ່ງຊາດ. ມັນແມ່ນບັນດາອົງການວາງ - ແຜນການຂອງລັດ ທີ່ເປັນຜູ້ແຈກຢາຍພາຫະນະການຜະລິດ ແລະ ພາຫະນະ ການອອກແຮງງານ ລະຫວ່າງຂະແໜງການຕ່າງໆຂອງເສດຖະກິດແຫ່ງຊາດ ບົນພື້ນຖານການເຄື່ອນໄຫວຂອງກົດເກນ ວ່າດ້ວຍການຂະຫຍາຍຕົວຂອງເສດ ຖະກິດແຫ່ງຊາດຢ່າງມີແຜນການ. ຢູ່ໃນເງື່ອນໄຂຂອງສັງຄົມນິຍົມ ມີ ການ ປ່ຽນແປງບໍ່ສະເພາະພຽງແຕ່ຂົງເຂດການເຄື່ອນໄຫວຂອງກົດເກນຄຸນຄ່າເທົ່ານັ້ນ ແຕ່ຍັງມີການປ່ຽນແປງທັງລັກສະນະໃນການປະກົດຕົວອອກມາຂອງ ມັນ ອີກ. ກົດເກນຄຸນຄ່າ ບໍ່ມີການເຄື່ອນໄຫວເປັນກຳລັງທີ່ຢູ່ເໜືອຄົນ.

ໃນເວລາຂັ້ນແຜນການເສດຖະກິດສັງຄົມນິຍົມ ມີຄວາມຈຳເປັນທີ່ ຈະ ຕ້ອງຄຳນຶງເຖິງການເຄື່ອນໄຫວຂອງກົດເກນມູນຄ່າ. ການໝູນໃຊ້ກົດເກນ-ມູນຄ່າ ມີຄວາມໝາຍສຳຄັນ ໃນການວາງລາຄາ. ກົດເກນມູນຄ່ານີ ການ ເຄື່ອນໄຫວຜ່ານກົນໄກລາຄາ. ແຕ່ຢູ່ໃນລະບອບສັງຄົມນິຍົມ ລາຄາສິນຄ້າ ບໍ່ ແມ່ນວາງກັນອອກມາແບບຕາມມີຕາມເກີດຄືກັນກັບຢູ່ໃນລະບອບທຶນນິຍົມ ແຕ ມັນຕ່າກແມ່ນວາງກັນອອກມາຢ່າງມີແຜນການ. ລັດສັງຄົມນິຍົມ ແມ່ນວາງລາ ຄາອອກມາໂດຍອີງໃສ່ການໃຊ້ຈ່າຍແຮງງານທີ່ຈຳເປັນທາງສັງຄົມ ຊຶ່ງໄດ ມີ ຂຶ້ນໃນເວລາຜະລິດສິນຄ້າໝາຍຄວາມວ່າ ຍຶນຍົ້ນຖານມູນຄ່າ. ການ ເຄື່ອນ ໄຫວດັ່ງກ່າວນີ ຂອງລັດໃນຕົວແລ້ວ ມັນກໍ່ແມ່ນການໝູນໃຊ້ກົດເກນມູນຄ່າໃນ ພາກຕົວຈິງ.

ໂດຍອີງໃສ່ຜົນປະໂຫຍດຂອງເສດຖະກິດແຫ່ງຊາດ ລັດສັງຄົມນິຍົມ ແມ່ນ ວາງລາຄາສິນຄ້າໂດຍມີການຜິດຽງອອກຈາກມູນຄ່າ ໃນລະດັບນັ້ນຫລືໃນລະ ດັບນີ. ໂດຍສວຍໃຊ້ນະໂຍບາຍລາຄາ ລັດມີຄວາມສາມາດນຳໃຊ້ພາກ ສ່ວນ ໜ່ວຍຂອງລາຍໄດ້ທີ່ສ້າງຂຶ້ນມາໄດ້ ຢູ່ໃນຂະແໜງການໃດໜ່ວຍນັ້ນ ເພື່ອ ຢູ ໜູນຂະແໜງການອື່ນຂຶ້ນຢ່າງໄວວາ. ສະຫລຸບຄວາມວ່າ ການຕົ້ລາຄາ ມີ ການຜິດຽງອອກຈາກມູນຄ່າຢູ່ໃນເສດຖະກິດສັງຄົມນິຍົມນັ້ນ ແມ່ນການ ຈັດ ແບບມີແຜນການ ຊຶ່ງແມ່ນລັດໄດ້ຂຶ້ນແຜນໄວ້ແລ້ວລ່ວງໜ້າ. ຍົກຕົວຢ່າງກໍ່ຄືວ່າ ໃນເວລາວາງລາຄາສິນຄ້າອຸປະໂພກຂອງສ່ວນຕົວບຸກຄົນນັ້ນ ລັດແມ່ນຄຳນຶງບໍ່ສະ ເພາະພຽງແຕ່ເຖິງມູນຄ່າເທົ່ານັ້ນ ແຕ່ຍັງຄຳນຶງເຖິງອັດຕາສ່ວນລະຫວ່າງ-ຄວາມຕ້ອງການກັບການສະໜອງ.

ລັດສັງຄົມນິຍົມ ໝູນໃຊ້ການເຄື່ອນໄຫວຂອງກົດເກນມູນຄ່າເພື່ອຊຸກຍູ ສົ່ງເສີມໃຫ້ການຜະລິດເຕີບໃຫຍ່ຂະຫຍາຍຕົວ, ເພີ່ມທະວີສະມັດຖະພາບຂອງ ການອອກແຮງງານຂຶ້ນ ແລະ ຫລຸດຜ່ອນຕົ້ນທຶນການຜະລິດ ແລະ ຮັບປະກັນ ໃຫ້ການຜະລິດມີຜົນກຳໄລ.

๔. ການຄ້າຢູ່ໃນລະບອບ ສັງຄົມນິຍົມ

ທາດແທ້ເນື້ອໃນ ແລະ ບົດບາດ ຂອງການຄ້າຢູ່ໃນລະບອບ ສັງຄົມນິຍົມ .

ເນື່ອງຈາກວ່າ ຜົນຂອງການ ອອກແຮງງານຢູ່ໃນສັງຄົມ ສັງຄົມນິຍົມ-ແມ່ນສິນຄ້າ ດັ່ງນັ້ນມັນຈຶ່ງຫລີກເວັ້ນບໍ່ໄດ້ທີ່ຈະຕ້ອງມີ<u>ການຈໍລະຈອນ</u> <u>ສິນຄ້າ</u> ໃນຖານະເປັນຕ່ອງໂສ້ຕິດຕໍ່ລະຫວ່າງການຜະລິດກັບການຊົມໃຊ້.

ການຈໍລະຈອນສິນຄ້າຢູ່ພາຍໃນພາກສ່ວນເສດຖະກິດຂອງລັດ ຊຶ່ງກວມ - ເອົາພາຫະນະການຜະລິດນັ້ນ ໄດ້ຮັບຊື່ວ່າເປັນການສະຫນອງທາງດ້ານ ວັດຖຸເຕັກນິກມັນດຳເນີນໄປຢ່າງມີແຜນການ.

<u>ການຄ້າ</u> ແມ່ນຮູບການຈໍລະຈອນສິນຄ້າ ເຄື່ອງໃຊ້ສອຍ ແລະ ການບໍລິ-ການທີ່ຈຳຫນ່າຍອອກຮັບໃຊ້ປະຊາຊົນພົນລະເມືອງຢູ່ໃນລະບອບສັງຄົມນິຍົມ . ການຄ້າສ້າງເງື່ອນໄຂໃຫ້ສາມາດປະຕິບັດສາຍພົວພັນຢ່າງມີ ແຜນການ ລະຫວ່າງຕົວເມືອງກັບຊົນນະບົດ, ລະຫວ່າງການຜະລິດ ສັງຄົມນິຍົມກັບການຊົມໃຊ້ຂອງປະຊາຊົນ ເພື່ອຮັບໃຊ້ວຽກງານຕອບສະຫນອງໃຫ້ໄດ້ຢ່າງເຕັມ ສ່ວນກວ່າເກົ່າ ຄວາມຮຽກຮ້ອງຕ້ອງການອັນນັບມື້ຫະວີຄູນຂຶ້ນຂອງຊາວຜູ້ອອກແຮງງານ.

ທາງດ້ານທາດແທ້ເນື້ອໃນຂອງມັນແລ້ວ ການຄ້າຢູ່ພາຍໃຕ້ລະບອບສັງຄົມນິຍົມ ແມ່ນແຕກຕ່າງກັນໂດຍພື້ນຖານກັບການຄ້າທຶນນິຍົມ.

ແມ່ນກຳມະສິດສ່ວນລວມ ແບບສັງຄົມນິຍົມກ່ຽວກັບພາຫະນະການຜະລິດທີ່ເປັນພື້ນຖານຂອງການຄ້າສັງຄົມນິຍົມ. ດ້ວຍເຫດນີ້ ການຄ້າຢູ່ໃນບັນດາປະ-ເທດສັງຄົມນິຍົມ ຈຶ່ງມີການວາງແຜນການ. ລັດເປັນຜູ້ກຳນົດບໍລິມາດ ການຈໍລະຈອນສິນຄ້າ, ລາຄາ, ການໃຊ້ຈ່າຍຄ່າຈໍລະຈອນ ແລະ ອື່ນໆບົນພື້ນ - ຖານແຜນການ. ຢູ່ໃນລະບອບສັງຄົມນິຍົມ ການຄ້າບໍ່ແມ່ນມີຈຸດປະສົງ ຊອກ-ຫາແຕ່ກຳໄລ, ເຮັດໃຫ້ພວກຫນຶ່ງຮັ່ງມີຂຶ້ນຢູ່ບົນຄວາມທຸກຈົນລົງຂອງຜູ້ອື່ນ,ມັນບໍ່ມີວິກິດການທາງດ້ານການຈຳຫນ່າຍແບບທີ່ຕິດພັນຢູ່ກັບການຄ້າທຶນນິຍົມ.

ການຄ້ามີບົດບາດອັນໃຫຍ່ຫລວງ ໃນການເສີມຂະຫຍາຍການຜະລິດ ສັງຄົມນິຍົມ, ມັນຕອບສະຫນອງຄວາມຮຽກຮ້ອງຕ້ອງການຂອງຕະຫລາດພາຍໃນ

ແລະ ປະກອບສ່ວນເຮັດໃຫ້ມີການປັບປຸງຄຸນນະພາບຂອງສິນຄ້າໃຫ້ດີຂຶ້ນ ກວ່າ ເກົ່າແລະ ອື່ນໆ.

ການຄ້າເປັນເຄື່ອງມືອັນໜຶ່ງ ທີ່ສຳຄັນ ເພື່ອໃຫ້ມີການແຈກຢາຍຕາມ - ແຮງງານ. ໂດຍຜ່ານສາຍການຄ້າສັງຄົມນິຍົມ ຊາວຜູ້ອອກແຮງງານ ແມ່ນ ນຳເອົາເງິນຄ່າການອອກແຮງງານທີ່ຕົນໄດ້ຮັບນັ້ນ ໄປແລກປ່ຽນເອົາເຄື່ອງ-ໃຊ້ສອຍ ແລະ ການບໍລິການທີ່ຈຳເປັນ. ພາຍໃຕ້ລະບອບສັງຄົມນິຍົມ ການ-ຄ້າມີການກະທົບຢ່າງຕັ້ງໜ້າບໍ່ສະເພາະໃສ່ແຕ່ການຜະລິດເທົ່ານັ້ນ ແຕ່ນັ້ນ ກໍ ຍັງມີການກະທົບໃສ່ທັງການອຸມໃຊ້ອີກດວຍ. ການຄ້າປະກອບສ່ວນເຮັດໃຫ້ ມີ ການນຳເອົາສິນຄ້າໃໝ່ ເຂົ້າໃນການອຸມໃຊ້ , ມັນສ້າງໃຫ້ປະຊາຊົນພົນລະ ເມືອງເກີດມີຄວາມຕ້ອງການ ແລະ ມີລົດນິຍົມອັນໃໝ່ທີ່ເໝາະສົມ.

ການຄ້າຍັງແມ່ນປັດໄຈອັນໜຶ່ງ ທີ່ສຳຄັນຍິ່ງ ເພື່ອປັບປຸງ ລະບອບ ສິນ ເຊື່ອ-ການເງິນ ແລະ ລະບອບເງິນໃຫ້ເຂັ້ມແຂງ.

ຮູບການການຄ້າຢູ່ໃນລະ ບອບສັງຄົມນິຍົມ

ຄືດ້ວງບົດຮຽນຂອງ ສ.ສ.ສ.ຊ ໄດ້ຊີ້ ໃຫ້ ເຫັນນັ້ນ ການຄ້າຢູ່ໃນລະບອບສັງຄົມນິຍົມ-ແມ່ນປະກົດຕົວອອກມາຢູ່ໃນສາມຮູບການຄື: ຮູບການການຄ້າຂອງລັດ, ຂອງສະຫະກອນ ແລະ ຂອງນາລວມ.

<u>ການຄ້າຂອງລັດ</u> ແມ່ນຂັ້ນສູງສຸດຂອງການຫັນປ່ຽນການຈໍລະຈອນສິນ ຄ້າ ມາເປັນຂອງສັງຄົມແບບສັງຄົມນິຍົມ. ຜູ້ທີ່ດຳເນີນການຄ້າຂອງລັດກໍ່ແມ່ນ ບັນ ດາອົງການຈັດຕັ້ງການຄ້າ ຊຶ່ງພາຫະນະທາງດ້ານວັດຖຸ ແລະ ເງິນຂອງມັນ-ລ້ວນແຕ່ເປັນກຳມະສິດຂອງລັດ.

ການຄ້າຂອງລັດມີບົດບາດນຳໜ້າຢູ່ໃນໝົດລະບົບການຄ້າ ໃນລະ ບອບ ສັງຄົມນິຍົມ. ຜ່ານສາຍການຄ້າຂອງລັດ ກໍ່ມີພາກສ່ວນອັນຫລວງຫລາຍ ຂອງ ສິນຄ້າ ອຸດສາຫະກຳທີ່ຜະລິດຢູ່ໃນວິສາຫະກິດຂອງລັດ ແລະ ກໍ່ມີພາກສ່ວນ - ໃຫຍ່ຂອງຜະລິດຕະພັນ ກະສິກຳທີ່ເຂົ້າຮ່ວມຢູ່ໃນການຈໍລະຈອນສິນຄ້າ.ຍົກຕົວ ຢ່າງກໍ່ຄືວ່າຢູ່ ສ.ສ.ສ.ຊ ຢູ່ໃນການຈໍລະຈອນສິນຄ້າຂາຍຍ່ອຍລ້ວນນັ້ນ ອັດ ຕາສ່ວນການຄ້າຂອງລັດ ແມ່ນລົ້ນ ກ0%. ການຄ້າຂອງລັດ ແມ່ນຮັບໃຊ້ ປະ ຊາຊົນພົນລະເມືອງຢູ່ໃນຕົວເມືອງແລະເຂດອຸດສາຫະກຳໃຈກາງເປັນຕົ້ນຕໍ.

ແມ່ນບັນດາວິສາຫະກິດຢູ່ໃນລະບົບສະຫະກອນການຊົມໃຊ້ ທີ່ເປັນຜູ້ ດຳເນີນ ການຄ້າຂອງສະຫະກອນ ເປັນຕົ້ນຕໍ. ຢູ່ ສ.ສ.ສ.ຊ ອັດຕາສ່ວນ ລະບົບສະຫະກອນການຊົມໃຊ້ມີຮອດເກົ້າສ່ວນສິບ ຂອງການຈໍລະຈອນ ສິນຄ້າ - ລວມຜ່ານສາຍການຄ້າຂອງລວມຫມູ່. ລະບົບສະຫະກອນການຊົມໃຊ້ສ່ວນຫຼາຍ ແມ່ນປະຕິບັດການສະຫນອງປະຊາຊົນ ຢູ່ໃນເຂດຊົນນະບົດ ດ້ວຍສິນຄ້າອຸດສາຫະກຳ, ມັນດຳເນີນການເກັບຊື້ຜະລິດຕະພັນກະສິກຳ, ດຳເນີນການຄ້າຜ່ານສະຫະກອນຊື້ຂາຍກ່ຽວກັບສິນຄ້າດັ່ງກ່າວນີ້. ການຄ້າຂອງສະຫະກອນຢູ່ ສ.ສ.ສ.ຊ ມີອັດຕາສ່ວນປະມານຫນຶ່ງສ່ວນສາມຂອງການຈໍລະຈອນສິນຄ້າ ຂາຍຍ່ອຍ.

ເຂົ້າຢູ່ໃນລະບົບການຄ້າຂອງລັດ ແລະ ຂອງລວມຫມູ່ ມັນກໍ່ມີວິສາຫະກິດການກິນດື່ມສາທາລະນະຊົນເຊັ່ນ-ໂຮງງານແຕ່ງກິນ, ຮ້ານກິນດື່ມ, ຮ້ານອາຫານ, ຮ້ານບໍລິການເຄື່ອງກິນດື່ມ ແລະ ອື່ນໆ. ການຄ້າຂອງລັດແລະ ຂອງລວມຫມູ່ຢູ່ ສ.ສ.ສ.ຊ ມີອັດຕາສ່ວນປະມານ ໝຊ% ຂອງການຈໍລະຈອນສິນ-ຄ້າທັງຫມົດຢູ່ໃນປະເທດ. ການຄ້າຂອງລັດ ແລະ ຂອງລວມຫມູ່ ແມ່ນຮັບປະກັນໃຫ້ມີຕະຫລາດທີ່ມີການຈັດຕັ້ງ. ນອກຈາກຕະຫລາດທີ່ມີການຈັດຕັ້ງແລ້ວມັນກໍ່ຍັງມີຕະຫລາດທີ່ບໍ່ມີການຈັດຕັ້ງພາຍໃຕ້ຮູບການເປັນຕະຫລາດຂອງນາລວມ.

ຜູ້ທີ່ດຳເນີນ ການຄ້າຂອງນາລວມ ກໍ່ແມ່ນບັນດານາລວມ ແລະ ສະມາ-ຊິກນາລວມ ທີ່ຂາຍຜະລິດຕະພັນເສດເຫລືອຂອງຕົນໃຫ້ປະຊາຊົນພົນລະເມືອງ ຕາມລາຄາທີ່ປະກອບຂຶ້ນມາ ພາຍໃຕ້ຜົນສະທ້ອນຈາກຄວາມຕ້ອງການ ແລະ ການສະຫນອງ. ແຕ່ລະດັບຂອງລາຄາດັ່ງກ່າວນີ້ ແມ່ນຢູ່ພາຍໃຕ້ຜົນກະທົບ - ທາງດ້ານເສດຖະກິດຂອງການຄ້າຂອງລັດ ແລະ ຂອງລວມຫມູ່.

ການຄ້າຂອງລັດ ແລະ ຂອງລວມຫມູ່ຍິ່ງເຕີບໃຫຍ່ຂະຫຍາຍຕົວເທົ່າ ໃດຄວາມຫມາຍຂອງຕະຫລາດທີ່ບໍ່ມີການຈັດຕັ້ງ ກໍ່ຍິ່ງຫລຸດຫນ້ອຍຖອຍລົງ ເທົ່ານັ້ນ.

ມີສອງຮູບການຈັດຕັ້ງການຄ້າຄື ຮູບການການຄ້າຂາຍຍົກ ແລະຂາຍຍ່ອຍ.

ການຄ້າຂາຍຍົກ ແມ່ນການຊື້ຂາຍສິນຄ້າເປັນ ພູດຂະຫນາດໃຫຍ່ ເພື່ອນຳໄປຈຳຫນ່າຍໃຫ້ຜູ້ທີ່ຊົມໃຊ້ໂດຍກົງ. ເຂົ້າຮ່ວມຢູ່ໃນການວິວັດດັ່ງກ່າວນີ້ ກໍ່ມີວິສາຫະກິດ ແລະສາຍການຄ້າທີ່ດຳເນີນການຊຳລະສະສາງນຳກັນແບບ ໃຊ້

ເວີ້ນໂອນ.

ການຄ້າຂາຍຍ່ອຍ ແມ່ນການຂາຍສິນຄ້າອຸ້ມໃຊ້ ໃຫ້ຊາວຜູ້ອອກແຮງງານ ແບບໃຊ້ເວີ້ນສົດ ຫລືແບບຕິດໜີ້. ຢູ່ໃນການຄ້າຂາຍຍ່ອຍຕ້ົນຕໍ ແມ່ນມີ ການ ຈຳໜ່າຍສິນຄ້າໃຊ້ສອຍທົ່ວໄປຂອງປະຊາຊົນ ກໍ່ຄືເຄື່ອງຮັບໃຊ້ ການຜະລິດ ບາງແນວເຊັ່ນ ເຄື່ອງມືຂະໜາດນ້ອຍ ແລະ ອຸປະກອນ, ພັດສະດຸກໍ່ສ້າງ ແລະອ່ືນໆ. ການຄ້າຂາຍຍ່ອຍແມ່ນດຳເນີນໄປຜ່ານຮ້ານຄ້າໃຫຍ, ຮ້ານ ຄ້າ ຂາຍເຄື່ອງກິນ, ຮ້ານຄ້າຂາຍສິນຄ້າອຸດສາຫະກຳ, ຮ້ານຄ້າຂາຍເຄື່ອງວັດ ສະເພາະ ແລະ ຮ້ານຄ້າອ່ືນໆ.

ລາຄາຂາຍຍ່ອຍແລະການໃຊ້ຈ່າຍ ສຳລັບຈຸລະຈອນ ຢູ່ໃນການຄ້າ

ຢູ່ໃນລະບອບສັງຄົມນິຍົມ ມີ ລາຄາ ຂາຍຍ່ອຍສອງຊະນິດຄື: ລາຄາ - ຂອງຕະຫລາດທີ່ມີການຈັດຕັ້ງ ແລະ ລາຄາຂອງຕະຫລາດທີ່ບໍ່ມີການຈັດຕັ້ງ ທີ່ສອດຄ່ອງກັບສອງຮູບການຕະຫລາດ.

ຢູ່ ສ.ສ.ສ.ຍ ລາຄາຂອງຕະຫລາດທີ່ມີການຈັດຕັ້ງກໍ່ແມ່ນລາຄາຂາຍຍົກ ຂອງອຸດສາຫະກຳ ແລະ ຂອງບັນດາອົງການຈັດຕັ້ງການຄ້າ, ມັນແມ່ນລາຄາ ຂາຍຍ່ອຍຢູ່ໃນການຄ້າຂອງລັດ ແລະ ຂອງລວມໝູ, ແມ່ນລາຄາເກັບຊື ຜະ ລິດຕະພັນທີ່ເປັນສິນຄ້າຂອງນາລວມ ແລະຂອງສະມາຊິກນາລວມ.

ລາຄາຂາຍຍ່ອຍຂອງລັດ ໝາຍຄວາມວ່າ ລາຄາທີ່ລັດຂາຍສິນຄ້າ ອຸດ ສາຫະກຳ ແລະ ສະບຽງອາຫານໃຫ້ປະຊາຊົນພົນລະເມືອງນັ້ນ ມີບົດບາດນຳ ໜ້າຢູ່ໃນລະບົບການຄ້າສັງຄົມນິຍົມ. ແມ່ນລັດທີ່ເປັນຜູ້ອາງລາຄາຂາຍຍ່ອຍຕ່ໍ ສິນຄ້າແຕ່ລະເຍ່ືອງຢ່າງມີແຜນການ.

ຢູ່ ສ.ສ.ສ.ຍ ມີການອາງລາຄາເປັນເອກະພາບໃນໜົດທ່ົວສະຫະພາບ ໂຊວຽດ ສຳລັບສິນຄ້າອຸດສາຫະກຳສ່ວນຫລວງຫລາຍ ແຕ່ສະເພາະສິນຄ້າປະ ເພດສະບຽງອາຫານບາງແນວແລ້ວນັ້ນກໍ່ມີການອາງລາຄາແຕກຕ່າງກັນ ອີງ ຕາມເຂດ ແລະ ລະດູການ.

ລາຄາຂາຍຍ່ອຍຂອງຕະຫລາດທີ່ມີການຈັດຕັ້ງນັ້ນ ບ່ໍມີການອ້ນໆລົ້ງໆແບບ ຕາມມີຕາມເກີດ. ມັນມີການປ່ຽນແປງແບບບ່ໍແມ່ນຕາມມີຕາມເກີດ, ແຕ່ນັ້ນມີ ການປ່ຽນແປງໃນເວລາໃດ, ໄປຕາມທິດໃດ ແລະ ເທ່ົາໃດນັ້ນກໍ່ສຸດແລ້ວແຕ

ລັດຈະເຫັນມີຄວາມຈຳເປັນເພື່ອແກ້ໄຂບັນຫາໜ້າທີ່ສະເພາະໜ້າ ທາງດ້ານ ເສດຖະກິດ-ການເມືອງ. ແຕ່ລັດພັດ ວາງລາຄາບໍ່ແມ່ນຕາມລຳພັງໃຈ. ລັດ ມີການຄຳນຶງເຖິງຄຸນຄ່າຂອງສິນຄ້າ.

ການຄ້າແມ່ນຕິດພັນກັບການໃຊ້ຈ່າຍ ແລະ ຈໍລະຈອນ. ການໃຊ້ຈ່າຍສຳ ລັບຈໍລະຈອນໃນການຄ້າສັງຄົມນິຍົມ ແມ່ນແຕກຕ່າງກັນໂດຍພື້ນຖານກັບ ການ ໃຊ້ຈ່າຍສຳລັບຈໍລະຈອນຂອງທຶນນິຍົມ.

<u>ການໃຊ້ຈ່າຍສຳລັບຈໍລະຈອນຢູ່ໃນລະບອບສັງຄົມນິຍົມ</u> ແມ່ນການໃຊ້ຈ່າຍ ຂອງບັນດາວິສາຫະກິດແລະອົງການຈັດຕັ້ງທີ່ຮັດການຄ້າເພື່ອຈະນຳເອົາສິນຄ້າ ຈາກການຜະລິດໄປຮອດຜູ້ຊົມໃຊ້.

ການໃຊ້ຈ່າຍດັ່ງກ່າວນີ້ ປະກອບດ້ວຍເງິນເດືອນຂອງພະນັກງານການຄ້າ, ການໃຊ້ຈ່າຍເພື່ອຂົນສົ່ງສິນຄ້າ, ການໃຊ້ຈ່າຍຄ່າບ້ອລະບັດຮັກສາຮ້ານຄ້າ - ແລະສາງ, ການໃຊ້ຈ່າຍຄ່າໝຶ້ນຫໍ້, ການໃຊ້ຈ່າຍຫ້ອງການ, ການຈ່າຍດອກ ເບ້ຍສິນເຊື່ອ ແລະ ອື່ນໆ. ແມ່ນລັດທີ່ເປັນຜູ້ວາງລະດັບການໝຸນວຽນສິນຄ້າ ອອກມາຢ່າງມີແຜນການ.

ຈຸດພິເສດຂອງການຄ້າສັງຄົມນິຍົມຢູ່ບ່ອນວ່າ ມັນມີການຫລຸດຜ່ອນການໃຊ້ ຈ່າຍເພື່ອຈໍລະຈອນ. ການຫລຸດຜ່ອນການໃຊ້ຈ່າຍດັ່ງກ່າວແມ່ນກຳນົດໝາຍສັງ ລວມທາງດ້ານຄຸນນະພາບກ່ຽວກັບວຽກງານຂອງບັນດາອົງການຈັດຕັ້ງທີ່ ຮັດ ການຄ້າ, ມັນເປັນບໍ່ເກີດອັນສຳຄັນຂອງການສະສົມສັງຄົມນິຍົມ.

ລະດັບການໃຊ້ຈ່າຍເພື່ອຈໍລະຈອນຢູ່ໃນການຄ້າສັງຄົມນິຍົມ ແມ່ນຕ່ຳກວ່າ ຢູ່ໃນປະເທດທຶນນິຍົມຫລາຍທີ່ສຸດ. ຕົວຢ່າງ ຢູ່ສະຫະລັດອາເມລິກາ ການໃຊ້ ຈ່າຍເພື່ອຈໍລະຈອນກວມຮອດໜຶ່ງສ່ວນສາມຂອງຄຸນຄ່າລາຄາການຈໍລະຈອນ-ສິນຄ້າຂາຍຍ່ອຍ, ແຕ່ຢູ່ ສ.ສ.ສ.ຊ ມັນພັດຕ່ຳກວ່າ ๗%.

ການຄ້າຕ່າງປະເທດ ຢູ່ໃນບັນດາປະເທດສັງຄົມນິຍົມ ຄຽງຄູ່ ກັນ ກັບການຄ້າພາຍໃນແລ້ວ ກໍ່ຍັງມີການຄ້າ - ຕ່າງປະເທດອີກ. ການຄ້າຕ່າງປະເທດສ້າງເງື່ອນໄຂໃຫ້ສາມາດສ່ວຍໃຊ້ທາ ດີຈາກການແບ່ງງານສາກົນ.

ຢູ່ໃນບັນດາປະເທດທຶນນິຍົມນັ້ນ ສ່ວນຫລາຍກໍ່ແມ່ນພວກກຸ່ມນາຍທຶນ ຜູກ

ຂ້າດ ທີ່ເປັນຜູ້ດຳເນີນການຄ້າຕ່າງປະເທດ. ແມ່ນລັດທີ່ເປັນຜູ້ດຳເນີນການ-ຄ້າຕ່າງປະເທດ ຂອງປະເທດສັງຄົມນິຍົມ. ໜຶ່ງໃນບັນດາດຳລັດອັນ ທຳອິດ ຂອງ ອຳນາດໂຊວຽດ ກໍ່ໄດ້ແກ້ດຳລັດວ່າດ້ວຍການຜູກຂາດ ການຄ້າ ຕ່າງປະເທດຂອງລັດ. ການຜູກຂ່າດການຄ້າຕ່າງປະເທດ ໝາຍຄວາມ ວ່າ ແມ່ນລັດທີ່ເປັນຜູ້ດຳເນີນໜ້າທີ່ວຽກງານຕົວຈິງ ກ່ຽວກັບການສົ່ງສິນຄ້າເຂົ້າ ປະເທດ ແລະ ສົ່ງສິນຄ້າອອກໄປຕ່າງປະເທດ.

ການຜູກຂາດການຄ້າຕ່າງປະເທດ ປະກອບສ່ວນໃຫ້ມີການຮັບປະກັນ - ຄວາມເປັນເອກະລາດທາງດ້ານເສດຖະກິດຂອງປະເທດສັງຄົມນິຍົມຈາກໂລກ ທຶນນິຍົມໂດຍມີການປ້ອງກັນ ຕະຫລາດພາຍໃນປະເທດ ຈາກທຶນຕ່າງດ້າວ . ພ້ອມກັນນີ້ ກໍ່ເປັນເຄື່ອງມືແຫ່ງການຮ່ວມມືທາງດ້ານເສດຖະກິດ ກັບປະເທດ ອື່ນໆຢູ່ໃນລະບົບສັງຄົມນິຍົມແຫ່ງໂລກ.

ການຄ້າຕ່າງປະເທດກໍ່ຍັງແມ່ນຮູບການພົວພັນທາງດ້ານເສດຖະກິດກັບປະ ເທດທຶນນິຍົມອີກ ອັນໜຶ່ງ ທີ່ສຳຄັນ. ບັນດາປະເທດສັງຄົມນິຍົມ ແມ່ນ ເປີດ ກ້ວາງການຄ້າກັນຢ່າງສຸດຂີດ ບົນພື້ນຖານການແບ່ງງານສາກົນ ກໍ່ຄື ເປີດ ກ້ວາງການຄ້າກັບບັນດາປະເທດທຶນນິຍົມເຊັ່ນດຽວກັນ. ການຄ້າຕ່າງປະເທດ ຂອງບັນດາປະເທດສັງຄົມນິຍົມ ແມ່ນດຳເນີນໄປບົນພື້ນຖານການເຄົາລົບນັບຖື ເອກະລາດແຫ່ງຊາດ,ຄວາມສະເໝີພາບກັນຢ່າງເຕັມສ່ວນ ແລະ ຕ່າງຝ່າຍ ຕ່າງມີຜົນປະໂຫຍດ ໂດຍບໍ່ມີເງື່ອນໄຂຜູກມັດທາງດ້ານການເມືອງ.

ການເຕີບໃຫຍ່ຂະຫຍາຍຕົວຢ່າງໜັ້ນທ່ຽງ ຂອງເສດຖະກິດສັງຄົມນິຍົມຢູ່ ສ.ສ.ສ.ຊ ແລະ ຢູ່ໃນປະເທດສັງຄົມນິຍົມອື່ນໆ, ການປາສະຈາກວິກິດການ ທາງດ້ານເສດຖະກິດ ທັງໝົດເຫລົ່ານີ້ລ້ວນແຕ່ດຳນ້ອຍຄວາມສະດວກ ໃຫ້ - ເປີດກ້ວາງການໝູນວຽນການຄ້າຕ່າງປະເທດ.

ຄຳຖາມເພື່ອທວນຄືນ

๑. ສາຍເຫດ ແລະ ຈຸດພິເສດຂອງການຜະລິດສິນຄ້າ ຢູ່ໃນລະບອບສັງຄົມນິຍົມມີຫຍັງແດ່ ?

๘. ຄຸນຄ່າໃຊ້ສອຍ ແລະ ມູນຄ່າສິນຄ້າ, ການອອກແຮງງານຮູບປະທຳ - ແລະການອອກແຮງງານນາມມະທຳ ຢູ່ໃນລະບອບສັງຄົມນິຍົມ.

๙. ອັນໃດກຳນົດບໍລິມາດມູນຄ່າສິນຄ້າ ?

๔. ປັດໄຈອັນໃດ ສົ່ງຜົນສະທ້ອນໃສ່ການຫລຸດມູນຄ່າສິນຄ້າລົງ ?

๕. ເມື່ອໃນຫາດແທ້ຂອງເງິນ ພາຍໃຕ້ລະບອບສັງຄົມນິຍົມ ແມ່ນຢູ່ ບ່ອນໃດ?

๒. ພາລະໜ້າທີ່ຂອງເງິນມີຫຍັງແດ່ ?

๗. ພາຍໃຕ້ລະບອບສັງຄົມນິຍົມ ມີປັດໄຈອັນໃດທີ່ຮັບປະກັນຄວາມໝັ້ນທ່ຽງຂອງເງິນ ?

๘. ພາຍໃຕ້ລະບອບສັງຄົມນິຍົມ ກົດເກນອ່າດ້ວຍຄຸນຄ່າມີບົດບາດແນວໃດ?

๙. ພາຍໃຕ້ລະບອບສັງຄົມນິຍົມ ຫາດແທ້ແລະບົດບາດຂອງການຄ້າຢູ່ ບ່ອນໃດ ?

๑๐. ຮູບການການຸ້ຄ້າ ໃນລະບອບສັງຄົມນິຍົມ ມີຫຍັງແດ່ ?

๑๑. ລາຄາຂາຍຍ່ອຍ, ລາຄາຂາຍຍົກ ແລະ ການໃຊ້ຈ່າຍສຳລັບຈໍລະຈອນແມ່ນຫຍັງ ?

247VII
ขามจำหาย

ພາກ ສິບສີ

ການແຈກຢ່າຍຕາມແຮງງານແລະ ຮູບການຈ່າຍຄ່າແຮງງານ. ຄັ້ງ ເພື່ອການອຸ້ມໃຊ້ ຂອງສັງຄົມ

ຢູ່ໃນແບບອັນການຜະລິດແຕ່ລະແບບ ກໍມີການແຈກຢາຍ ທີ່ ສອດຄ່ອງ ກັບມັນ. ການພົວພັນຢູ່ໃນການຜະລິດ ເປັນໄປຄືແນວໃດ ການພົວພັນ ຢູ່ໃນ ການແຈກຢາຍ ກໍເປັນໄປຄືແນວນັ້ນໂລດ.

ຢູ່ໃນເງື່ອນໄຂຂອງທຶນນິຍົມ ມີການແຈກຢາຍ ເພື່ອຮັບໃຊ້ ສິດຜົນ ປະ ໂຫຍດຂອງພວກອຸ້ນຊູດຣິດ ທີ່ພາກັນກອບໂກຍເອົາສ່ວນໃຫຍ່ຂອງຜະລິດຕະ ພັນຂອງສັງຄົມ ທີ່ສ້າງຂຶ້ນມາດ້ວຍແຮງງານຂອງພວກກຳມະກອນ ພາຍໃຕ້ຮູບ ການເປັນຄຸນຄ່າສ່ວນເກີນ. ການແຈກຢາຍບໍ່ແມ່ນປະຕິບັດໄປຕາມແຮງ ງານ ແຕ່ຫາກປະຕິບັດໄປຕາມທຶນ.

ພາຍໃຕ້ລະບອບສັງຄົມນິຍົມ ການແຈກຢາຍຜະລິດຕະພັນລວມຍອດ ຂອງ ສັງຄົມເປັນຈຸດເລີ່ມຕົ້ນ ແລະ ເປັນພື້ນຖານທາງດ້ານວັດຖຸຂອງການຜະລິດສຳ ສັງຄົມນິຍົມແບບເປີດກວ້າງ. ພາກສ່ວນໜຶ່ງຂອງຜະລິດຕະພັນລວມຍອດຂອງ ສັງຄົມ ແມ່ນແມ່ໃສ່ເອົາໄປໃຊ້ເພື່ອທົດແທນຄືນຄ່າພາຫະນະການຜະລິດ ທີ່ໄດ້

ຊຸມໃຊ້ໄປແລ້ວນັ້ນ. ອີກພາກສ່ວນໜຶ່ງ ກໍ່ແມ່ນປະກອບເຂົ້າເປັນລາຍໄດ້ແຫ່ງ ຊາດທີ່ມີການແບ່ງປັນເພື່ອຮັບໃຊ້ສິດຜົນປະໂຫຍດ ຂອງທັງໝົດສັງຄົມ. ພາກ ສ່ວນໜຶ່ງຂອງລາຍໄດ້ແຫ່ງຊາດ ທີ່ສ້າງຂຶ້ນມາດ້ວຍແຮງງານທີ່ຈຳເປັນ ນັ້ນ ແມ່ນມີການແບ່ງປັນ ໂດຍຜ່ານການຈ່າຍຄ່າແຮງງານ ອີງຕາມຈຳນວນ ແລະ ຄຸນນະພາບຂອງມັນ. ອັນນີ້ແມ່ນຮູບການແຈກຢາຍທີ່ເປັນພື້ນຖານ.

ຢູ່ໃນມາດຕາ ໑໔ ຂອງລັດຖະທຳມະນູນຂອງ ສ.ສ.ສ.ຊ. ມີການ ກຳ ນົດລັກສະນະການແຈກຢາຍໃນສັງຄົມ ສັງຄົມນິຍົມຂະຫຍາຍຕົວ. ມາດຕາດັ່ງ ກ່າວນີ້ໄດ້ເວົ້າວ່າ: " ບໍ່ເກີດແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງຄວາມຮັ່ງ ມີຂອງສັງຄົມ, ຂອງລະດັບຄວາມຢູ່ດີກິນດີຂອງປະຊາຊົນ ແລະ ຂອງ ຄົນໂຊ ວຽດ ແຕ່ລະຄົນນັ້ນ ແມ່ນການອອກແຮງງານຂອງຊາວໂຊວຽດ ທີ່ໄດ້ຮັບການ ປົດປ່ອຍ ອອກຈາກການຂູດຮີດ.

ໂດຍສອດຄ່ອງກັບຫລັກການຂອງສັງຄົມນິຍົມທີ່ວ່າ " ແຕ່ລະຄົນປະກອບ - ສ່ວນຕາມຄວາມສາມາດ ແລະ ໄດ້ຮັບຕາມແຮງງານ " ນັ້ນລັດແມ່ນດຳເນີນ ການກວດກາ ການອອກແຮງງານ ແລະ ການແຈກຢາຍ ".

ພາຍໃຕ້ລະບອບສັງຄົມນິຍົມ ການແຈກຢາຍ ອີງຕາມແຮງງານ ແມ່ນ ຄວາມຈຳເປັນຢ່າງນອກຕົວ. ມັນມາຈາກສາຍເຫດທີ່ວ່າ ການຜະລິດແມ່ນດຳ ເນີນໄປບົນພື້ນຖານກຳມະສິດລວມໝູ່ ແບບສັງຄົມນິຍົມ ກ່ຽວກັບພາຫະນະ - ການຜະລິດ. ກຳລັງການຜະລິດຢູ່ໃນໄລຍະສັງຄົມນິຍົມ ຍັງບໍ່ທັນມີການ ຂະ ຫຍາຍຕົວໄປເຖິງລະດັບ ທີ່ຈະພໍສາມາດຮັບປະກັນເຮັດໃຫ້ມີການແຈກຢາຍຊຸບ ສົມທາງດ້ານວັດຖຸ ລະຫວ່າງຄົນທັງຫລາຍ ອີງຕາມຄວາມຕ້ອງການໄດ້ເທື່ອ. ນອກຈາກນີ້ ການອອກແຮງງານກໍ່ຍັງບໍ່ທັນໄດ້ກາຍມາເປັນ ຄວາມຮຽກ ຮ້ອງ ຕ້ອງການອັນເປັນຕາຍອັນດັບໜຶ່ງເທື່ອ, ມັນຍັງພຽງແຕ່ເປັນພາຫະນະ ເພື່ອ ລ້ຽງຊີບເທົ່ານັ້ນ ແລະ ຈາກນີ້ນັ້ນກໍ່ຮຽກຮ້ອງໃຫ້ມີການ ໃຫ້ບຳເນັດໃນລະດັບ ທີ່ເໝາະສົມ. ສະຫລຸບແລ້ວ ພາຍໃຕ້ລະບອບສັງຄົມນິຍົມ ກໍ່ຍັງຄົງມີ ຄວາມ ແຕກຕ່າງກັນຢ່າງຫລວງຫລາຍ ລະຫວ່າງການອອກແຮງງານດ້ວຍມັນສະ - ໝອງ ກັບ ການອອກແຮງງານດ້ວຍຮ່າງກາຍ ກໍ່ຄືຄວາມແຕກຕ່າງ ກັນລະ ຫວ່າງການອອກແຮງງານ ທີ່ມີລະດັບວິຊາສະເພາະ ກັບ ການອອກແຮງງານ ທີ່ບໍ່ມີລະດັບວິຊາສະເພາະ.

ພາຍໃຕ້ລະບອບສັງຄົມນິຍົມ ການອອກແຮງງານແມ່ນພື້ນຖານອັນໜຶ່ງອັນດຽວເທົ່ານັ້ນ ທີ່ກຳນົດຖານະຂອງຄົນຢູ່ໃນສັງຄົມ ແລະ ຄວາມຢູ່ດີກິນດີ ຂອງຜູ້ກຽວ. ໂດຍສອດຄ່ອງກັບສິ່ງທີ່ກ່າວມານັ້ນ ມີແຕ່ຈຳນວນ ແລະ ຄຸນະພາບ-ຂອງການອອກແຮງງານ ຂອງແຕ່ລະຄົນຢູ່ໃນສັງຄົມເທົ່ານັ້ນ ທີ່ສາມາດ ຈະເປັນໜ່ວຍວັດແທກ ການແຈກຢາຍ ຂອງວັດຖຸອຸມໃຊ້ຢູ່ໃນລະບອບສັງຄົມນິຍົມ .

ການແຈກຢາຍຕາມແຮງງານ ແມ່ນກົດໝາຍທາງດ້ານເສດຖະກິດຂອງສັງຄົມ ສັງຄົມນິຍົມ.

ວ.ອ.ເລນິນ ໄດ້ຕີລາຄາການແຈກຢາຍຕາມແຮງງານ ໃນລະບອບ ສັງຄົມນິຍົມວ່າ ເປັນໄມ້ງັດອັນແຮງກ້າ ທີ່ສ້າງເງື່ອນໄຂໃຫ້ການຜະລິດເຕີບໃຫຍ່ຂະຫຍາຍຕົວ, ໃຫ້ຄຸນນະພາບຂອງການອອກແຮງງານ ແລະ ສະມັດຖະພາບ ຂອງມັນສູງຂຶ້ນຕື່ມ, ໃຫ້ຊາວຜູ້ອອກແຮງງານແຕ່ລະຄົນ ມີການເສີມຂະຫຍາຍ ຫົວຄິດຈິດໃຈຂອງຕົນ.

ໜຶ່ງໃນບັນດາທ່າດີເລີດອັນສຳຄັນຍິ່ງ ຂອງສັງຄົມນິຍົມ ຕໍ່ ທຶນນິຍົມນັ້ນກໍ່ຢູ່ບ່ອນມີການແຈກຢາຍຕາມແຮງງານ. ການແຈກຢາຍຊຸບສົມທາງດ້ານ ວັດຖຸ ຕາມແຮງງານນັ້ນ ໄດ້ລົບລ້າງບໍ່ໃຫ້ມີລາຍໄດ້ທີ່ບໍ່ແມ່ນມາຈາກການອອກ ແຮງງານຄື ບໍ່ໃຫ້ມີລັດທິເກາະຫ້ອຍກິນ ທີ່ເປັນການຈ່ອງດ້ວງເອົາຊຸບພະຍາກອນ - ຢ່າງຫລວງຫລາຍ ອອກຈາກການຜະລິດ ແລະ ການຕອບສະໜອງ ຄວາມ ຮຽກຮ້ອງຕ້ອງການຂອງຊາວຜູ້ອອກແຮງງານ. ການແຈກຢາຍຕາມແຮງງານ ຍັງເປັນປັດໄຈຊຸກຍູ້ການຜະລິດອັນສຳຄັນ ໂດຍເປີດຊ່ອງທາງຢ່າງກ້ວາງ - ຂວາງ ເພື່ອເສີມຂະຫຍາຍຄວາມສາມາດ ຂອງຊາວຜູ້ອອກແຮງງານ. ວ.ອ.ເລນິນ ໄດ້ເວົ້າວ່າ ຢູ່ໃນຫລັກການທີ່ວ່າ ຜູ້ໃດບໍ່ອອກແຮງງານ ຜູ້ນັ້ນແມ່ນ ບໍ່ໄດ້ກິນ " ນັ້ນໄດ້ມີການວາງ " ພື້ນຖານຂອງສັງຄົມນິຍົມ, ມີການວາງ ບໍ່ເກີດ ອັນບໍ່ໝົດເປັນຈັກເທື່ອ ຂອງກຳລັງແຮງງານຂອງສັງຄົມນິຍົມ,ວາງປັດໄຈ ແຫ່ງໄຊຊະນະໃນຂັ້ນສຸດທ້າຍຂອງສັງຄົມນິຍົມ ອັນບໍ່ມີຫຍັງຈະມາມ້າງເພ ທຳລາຍໄດ້ ". ๑)

---

๑) ວ.ອ.ເລນິນ.ນິພົນຄົບຊຸດ,ເຫລັ້ມ ๓๑, ໜ້າ ๓๔๒ .

ກົດເກນວ່າດ້ວຍການແຈກຢາຍຕາມແຮງງານນັ້ນ ຫມາຍເຖິງຄວາມ ຈຳເປັນ: ๑) ໃນການແຈກຢາຍ ຄັງເພື່ອຊົນໃຊ້ ຂອງສ່ວນຕົວໃຜລາວໃຫ້ສອດຄ່ອງກັບຈຳນວນ ແລະ ຄຸນນະພາບຂອງແຮງງານທີ່ຮັບໃຊ້ສັງຄົມ. ອັນນີ້ຮັບປະກັນໃຫ້ຊາວຜູ້ອອກແຮງງານມີຄວາມສົນໃຈ ໃນການນຳໃຊ້ ເວລາອອກແຮງງານຂອງຕົນ ຢ່າງເຕັມສ່ວນກວ່າເກົ່າ ແລະ ຢ່າງຖືກຕ້ອງ ເຫມາະສົມກວ່າເກົ່າ; ๘) ໃນການຈ່າຍຄ່າແຮງງານ ທີ່ມີລະດັບຄວາມຊຳນິຊຳ ນານໃຫ້ສູງກວ່າ ຖ້າທຽບໃສ່ແຮງງານ ທີ່ບໍ່ມີລະດັບ ໂດຍມີການສົ້ນເປືອງ ເວລາອອກແຮງງານເທົ່າທຽມກັນ. ອັນນີ້ເຮັດໃຫ້ຊາວຜູ້ອອກແຮງງານ ມີຄວາມສົນໃຈໃນການຍົກສູງລະດັບຄວາມຊຳນິຊຳນານ ແລະ ລະດັບວັດທະນະທຳ-ເຕັກນິກຂຶ້ນຕື່ມ; ຊ) ໃນການບຳເນັດທາງດ້ານວັດຖຸ ໃນລະດັບສູງກວ່າ ຕໍ່ການອອກແຮງງານ ຢູ່ໃນເງື່ອນໄຂອັນຫນັກຫນ່ວງຂອງການຜະລິດ (ຂະແຫນງ - ການອຸດສາຫະກຳຫລອມໂລຫະ, ອຸດສາຫະກຳຂຸດຄົ້ນຖານຫີນ ແລະຂະແຫນງການອຸດສາຫະກຳອື່ນໆ) ຖ້າທຽບໃສ່ການອອກແຮງງານ ຢູ່ໃນເງື່ອນ ໄຂແບບທຳມະດາ. ອັນນີ້ຮັບປະກັນໃຫ້ມີການທົດແທນການສົ້ນເປືອງແຮງງານຄົນທາງດ້ານວັດຖຸ.

ສະຫລຸບຄວາມແລ້ວ ກົດເກນທາງດ້ານເສດຖະກິດ ກ່ຽວກັບການແຈກ - ຢາຍຕາມແຮງງານນັ້ນ ແມ່ນສະແດງເຖິງຄວາມຈຳເປັນ ໃນການແຈກ ຢາຍຊັບສິນ ທາງດ້ານວັດຖຸ ໂດຍອີງຕາມຈຳນວນ ແລະ ຄຸນນະພາບໂດຍກົງຂອງການອອກແຮງງານ ຂອງຊາວຜູ້ອອກແຮງງານແຕ່ລະຄົນ, ໃນການຈ່າຍ ຄ່າແຮງງານ ໃນລະດັບເທົ່າກັນຂອງພົນລະເມືອງທັງຫມົດ ໂດຍບໍ່ຈຳແນກ ເພດໄວ, ອາຍຸກະສຽນ, ຜິວພັນ ແລະ ສັນຊາດ.

ກົດເກນທາງດ້ານເສດຖະກິດກ່ຽວກັບ ການແຈກຢາຍຕາມແຮງງານແມ່ນຫນຶ່ງໃນບັນດາກົດເກນພື້ນຖານ ກ່ຽວກັບການເຄື່ອນໄຫວຂອງເສດຖະກິດຢູ່ໃນສັງຄົມ ສັງຄົມນິຍົມ. ຈະມີການກ້າວຂຶ້ນໄປສູ່ການແຈກຢາຍ ແບບກອມມູນິດກໍ່ຕໍ່ເມື່ອມີຊັບສິນທາງດ້ານວັດຖຸ ແລະ ວັດທະນະທຳຢ່າງລົ້ນເຫລືອ ແລະ ການອອກແຮງງານກໍ່ຈະກັບກາຍເປັນຄວາມຮຽກຮ້ອງຕ້ອງການອັນເປັນຕາຍອັນດັບຫນຶ່ງ.

ໃນເວລາແຈກຢາຍຕາມແຮງງານນັ້ນ ກໍ່ມີການແຈກຢາຍຜະລິດຕະພັນ -

ລວມຍອດ ບໍ່ແມ່ນທັງໝົດຂອງສັງຄົມ ແຕ່ຫາກແມ່ນພຽງແຕ່ພາກສ່ວນ ໜຶ່ງ ຂອງມັນເທົ່ານັ້ນ.

ຢູ່ໃນບົດທີ່ໃສ່ຊື່ວ່າ " ການຕຳນິຕິຊົມໂຄງການໂກຕາ " ນັ້ນ ກ. ມາກ ໄດ້ຊີ້ບອກໃຫ້ເຫັນວ່າ ເພື່ອຮັດແນວໃດ ຢາກໃຫ້ສັງຄົມ ສັງຄົມນິຍົມໄດ້ມີ - ຄວາມສາມາດ ເຄື່ອນໄຫວ ແລະ ຂະຫຍາຍຕົວຢ່າງປົກກະຕິໄດ້ນັ້ນ ຈາກຜະ ລິດຕະພັນລວມຍອດຂອງສັງຄົມ ມັນມີຄວາມຈຳ ເປັນ ທີ່ຈະຕ້ອງຫກເອົາ : ກ) ລາຍຈ່າຍທົດແທນຄ່າພາຫະນະການຜະລິດ ທີ່ໄດ້ມີການຊົມໃຊ້ໄປແລ້ວ ; ຂ) ພາກສ່ວນໃດໜຶ່ງສະເພາະ ເພື່ອເປີດກວ້າງການຜະລິດ; ຄ) ຄັງ ສະສົມແຮໄວ້ ຫລື ຄັງປະກັນໄພ; ງ) ການໃຊ້ຈ່າຍຄ່າຊົມຄອງ ແລະ ບໍລະບັດຮັກສາໂຮງງານ, ໂຮງໝໍ ແລະ ອື່ນໆ; ຈ) ຄັງເພື່ອ ລ້ຽງ ຜູ້ທີ່ບໍ່ມີຄວາມສາມາດອອກແຮງງານ. ມີຄວາມຈຳເປັນທີ່ຈະຕ້ອງຫັກເອົາທັງ ພາກສ່ວນຜະລິດຕະພັນລວມຍອດຂອງສັງຄົມ ທີ່ຈະໄປຮັບໃຊ້ຄວາມຕ້ອງ ການ ຂອງວຽກງານປ້ອງກັນຊາດ.

ສະຫລຸບຄວາມ ວ່າແມ່ນພາກສ່ວນຜະລິດຕະພັນລວມຍອດຂອງສັງຄົມ ທີ່ ປະກອບເຂົ້າເປັນ ຄັງເພື່ອ ຊົມໃຊ້ສ່ວນຕົວໃຜລາວນັ້ນ ທີ່ມີການແຈກ ຢາຍ ຕາມແຮງງານ.

ພາກສ່ວນທີ່ມີການອອກແຮງງານ ທີ່ສ້າງຂຶ້ນມາໃໝ່ ຈຸ່ງສົ່ງເຂົ້າ ຢູ່ ໃນ ຄັງເພື່ອ ຊົມໃຊ້ສ່ວນຕົວບຸກຄົນ ຂອງຊາວຜູ້ອອກແຮງງານ ຢູ່ໃນຂົງ ເຂດ ການຜະລິດວັດຖຸນັ້ນ ແມ່ນເອີ້ນກັນວ່າ ເປັນ <u>ຜະລິດຕະພັນອັນຈຳເປັນ</u> ແລະ ສະເພາະແຮງງານທີ່ສ້າງຜະລິດຕະພັນອັນນັ້ນອອກມານັ້ນ ແມ່ນເອີ້ນກັນວ່າເປັນ <u>ແຮງງານອັນຈຳເປັນ</u>.

ພາກສ່ວນທີ່ມີຂອງການອອກແຮງງານທີ່ສ້າງຂຶ້ນມາໃໝ່ ຢູ່ໃນຂົງເຂດ - ການຜະລິດ ແລະ ໃນຂົງເຂດການບໍລິການ ໂດຍມີຈຳນວນລົ້ມຜະລິດຕະ ພັນ ອັນຈຳເປັນ ຈຸ່ງສົ່ງເຂົ້າຢູ່ໃນຄັງ ຂອງສັງຄົມ (ໂດຍມີການຫັກເອົາລາຍ ຈ່າຍທົດແທນຄ່າພາຫະນະການຜະລິດ ທີ່ຖືກຊົມໃຊ້ໄປແລ້ວນັ້ນ) ແມ່ນ ເອີ້ນ ກັນວ່າເປັນ <u>ຜະລິດຕະພັນສ່ວນເກີນ</u> ແລະ ສະເພາະແຮງງານທີ່ສ້າງຜະລິດ- ຕະພັນອັນນັ້ນມານັ້ນ ແມ່ນເອີ້ນກັນວ່າເປັນ <u>ແຮງງານສ່ວນເກີນ</u>. ພາຍ ໃຕ້ ລະບອບສັງຄົມນິຍົມ ຜະລິດຕະພັນສ່ວນເກີນທີ່ສ້າງຂຶ້ນມາ ດ້ວຍແຮງງານສ່ວນ

ເກີນນັ້ນ ແມ່ນສິ່ງເຂົ້າໄປຕອບສະໜອງຄວາມຮຽກຮ້ອງຕ້ອງການລວມ ຢູ່ໃນ
ສັງຄົມ. ມີການນຳໃຊ້ຜະລິດຕະພັນສ່ວນເກີນ ເພື່ອຮັບປະກັນໃຫ້ການຜະລິດ-
ເຕີບໃຫຍ່ຂະຫຍາຍຕົວ ຢ່າງເປັນປົດລຽນຕິດ ແລະ ເພື່ອປັບປຸງການຜະລິດ
ໃຫ້ກ້າວໜ້າກວ່າເກົ່າ, ເພື່ອປະກອບສ້າງ ຄັງປະກັນໄພ ແລະ ຄັງ
ສະສົມແຮ ໄວ້, ເພື່ອວຽກງານປ້ອງກັນຊາດ, ເພື່ອຕອບສະໜອງຄວາມຮຽກ
ຮ້ອງຕ້ອງການ ຂອງຊາວຜູ້ອອກແຮງງານຢູ່ໃນຂົງເຂດ ທີ່ບໍ່ມີລັກສະນະ ການ
ຜະລິດ.

ພາຍໃຕ້ລະບອບສັງຄົມນິຍົມ ຜະລິດຕະພັນສ່ວນເກີນ ມີການນຳໃຊ້ບໍ່ແມ່ນ
ເພື່ອຕອບສະໜອງສິດຜົນປະໂຫຍດ ຂອງບຸກຄົນໃດໜຶ່ງສະເພາະແຕ່ມັນຫາກ
ຖືກສ່ຳເຂົ້າເພື່ອ ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງສັງຄົມ ເວົ້າ
ລວມ ແລະ ຂອງຊາວຜູ້ອອກແຮງງານແຕ່ລະຄົນເວົ້າສະເພາະ. ຢູ່ໃນ ຕົວ
ແລ້ວ ມັນກໍ່ບໍ່ແມ່ນລຸນລາສ່ວນເກີນ ທັງນີ້ຍ້ອນວ່າຢູ່ແມ່ນບໍ່ມີພວກອຸ້ມຊັ້ນ ຊຸດ
ຣິດ ແລະ ກໍ່ບໍ່ມີການກົດຂີ່ຊຸດຣິດ.

ພາຍໃຕ້ລະບອບສັງຄົມນິຍົມ ແມ່ນບໍ່ມີຂໍ້ຂັດແຍ່ງ ແບບເປັນປໍລະປັກກັນ ທີ່
ມີຢູ່ໃນສັງຄົມທຶນນິຍົມລະຫວ່າງ ຜະລິດຕະພັນອັນຈຳເປັນ ກັບ ຜະລິດຕະພັນ-
ສ່ວນເກີນ. ຢູ່ໃນສັງຄົມ ສັງຄົມນິຍົມ ຜະລິດຕະພັນສ່ວນເກີນ ກໍ່ແມ່ນມີຄວາມ
ຈຳເປັນເຊັ່ນດຽວກັນ ສຳລັບຊາວຜູ້ອອກແຮງງານຢູ່ໃນຂົງເຂດການຜະລິດ -
ເພາະວ່າມັນຖືກສ່ຳເຂົ້າໄປຮັບໃຊ້ຄວາມຮຽກຮ້ອງຕ້ອງການຂອງຊາວຜູ້ ອອກ
ແຮງງານທັງໝົດ ແລະ ຖືກນຳໃຊ້ເພື່ອຮັດໃຫ້ການຜະລິດຂອງສັງຄົມມີການ
ຂະຫຍາຍຕົວໄປຢ່າງກ້າວໜ້າ.

ການແຈກຢາຍຕາມແຮງງານແມ່ນຮັບປະກັນໃຫ້ຄົນ <u>ມີຄວາມສົນໃຈ</u> <u>ທາງ
ດ້ານວັດຖຸ</u> <u>ໃນໜ້າທີ່ຜົນຂອງການຜະລິດ</u>, ມັນຊຸກຍູ້ສ່ຳເສີມໃຫ້ສະມັດຖະພາບ
ຂອງການອອກແຮງງານ ມີການເຕີບໃຫຍ່ຂະຫຍາຍຕົວ, ຊາວຜູ້ອອກແຮງ -
ງານ ຍົກສູງລະດັບຄວາມຊຳນິຊຳນານຂຶ້ນ ແລະ ໃຫ້ມີການດັດ ແປງ
ເຕັກນິກໃນການຜະລິດ ໃຫ້ກ້າວໜ້າກວ່າເກົ່າ, ການແຈກຢາຍຕາມ ແຮງ
ງານມີບົດບາດອັນໃຫຍ່ຫລວງເຊັ່ນດຽວກັນ ທາງດ້ານການສຶກສາອົບຮົມ, ມັນ
ຮັດໃຫ້ຄົນມີຄວາມລ້ຽງເຄ້ຍຕໍ່ລະບຽບວິໄນສັງຄົມນິຍົມ ແລະ ກໍ່ຮັດໃຫ້ ການ
ອອກແຮງງານ ເປັນຂອງໜ້ົດທຸກຄົນ ແລະ ເປັນອັນຂາດບໍ່ໄດ້.

ຄວາມຈຳເປັນທີ່ຈະຕ້ອງມີຄວາມສົນໃຈທາງດ້ານວັດຖຸ ຢູ່ໃນລະບອບ ສັງຄົມນິຍົມນັ້ນ ມາຈາກບ່ອນທີ່ວ່າການອອກແຮງງານ ບໍ່ທັນໄດ້ກັບກາຍ ມາເປັນ ຄວາມຮຽກຮ້ອງຕ້ອງການອັນເປັນຕາຍອັນດັບໜຶ່ງຂອງໝົດທຸກຄົນຢູ່ໃນສັງຄົມ ເທື່ອ. ພາຍໃຕ້ລະບອບສັງຄົມນິຍົມ ກໍຍັງບໍ່ທັນໄດ້ມີການລົບລ້າງຮອງຮອຍ - ເສດເຫລືອ ຂອງທຶນນິຍົມຢູ່ໃນຈິດສຳນຶກຂອງຄົນຢ່າງສົ້ນເຊີງເທື່ອ. ໄປຄຽງ ຄູ່ກັບຊາວຜູ້ອອກແຮງງານ ພາກສ່ວນຫລວງຫລາຍ ທີ່ປະຕິບັດພັນທະຂອງຕົນຕໍ່ ສັງຄົມຢ່າງຊື່ສັດ ກໍຍັງມີຄົນທີ່ວາງທ່າທີແບບບໍ່ສັດຊື່ຕໍ່ການອອກແຮງງານ ແລະ ນ້ຳງເພລະບຽບວິໄນ ໃນການອອກແຮງງານ.

ການປະຕິບັດຫລັກການຊຸກຍູ້ທາງດ້ານວັດຖຸ ເພື່ອດຶງດູດຄວາມສົນໃຈເປັນ ການຮັບປະກັນ ກ່ຽວກັບການສຶກສາອົບຮົມ ໃຫ້ຄົນວາງທ່າທີແບບກອມມູນິດ ຕໍ່ ການອອກແຮງງານ, ມັນເປັນເຄື່ອງມືອັນສຳຄັນຍິ່ງ ໃນການຕໍ່ສູ້ເພື່ອລົບລ້າງ ຮອງຮອຍເສດເຫລືອຂອງລະບອບເກົ່າ ຢູ່ໃນຈິດສຳນຶກຂອງຄົນ, ລົບ ລ້າງ ຮອງຮອຍເສດເຫລືອ ຂອງການວາງທ່າທີແບບເກົ່າຕໍ່ການອອກແຮງງານ.

ການປະຕິບັດຫລັກການຊຸກຍູ້ທາງດ້ານວັດຖຸ ເພື່ອດຶງດູດຄວາມສົນໃຈເປັນ ການຫລີກເວັ້ນບໍ່ໃຫ້ມີການແຈກຢາຍວັດຖຸເທົ່າທຽມກັນ.

ຈາກການແຈກຢາຍເຄື່ອງຂອງແບບເທົ່າທຽມກັນ ບໍ່ສອດຄ່ອງກັບສັງຄົມນິ ຍົມ. ກົດເກນເສດຖະກິດກ່ຽວກັບການແຈກຢາຍຕາມແຮງງານ ຮຽກຮ້ອງໃຫ້ ມີຄວາມຈຳເປັນ ທີ່ຈະຕ້ອງຕໍ່ສູ້ຢ່າງເດັດຂາດ ຕ້ານກັບປະກົດການແຈກ ຢາຍ ແບບເທົ່າທຽມກັນ. ຄວາມພະຍາຍາມຂອງພວກ "ນັກທິດສະດີ" ນາຍທຶນ - ນ້ອຍ ທີ່ຢາກຕູ້ຫາວ່າ ລັດທິມາກ-ເລນິນມີຄວາມຄິດຄວາມເຫັນ ຢາກໃຫ້ ປະ ຕິບັດ "ຄວາມສະເໝີພາບ" ແບບເດັດຖານນັ້ນ ແມ່ນແມ ໃສ່ຈຸດປະສົງ ບິດ ເບືອນທິດສະດີ ມາກ-ເລນິນ. ຕາມລັດທິມາກ-ເລນິນ ແລ້ວ ຄວາມເປັນ-ເອກະພາບໃນເງື່ອນໄຂຂອງສັງຄົມນິຍົມ ບໍ່ແມ່ນການແຈກຢາຍ ເທົ່າທຽມກັນ ໃນດ້ານຄວາມຮຽກຮ້ອງຕ້ອງການ ຂອງສ່ວນຕົວບຸກຄົນ ແລະ ໃນດ້ານຊີວິດ-ປະຈຳວັນ (ຄວາມສະເໝີພາບໃນການຊົມໃຊ້) ແຕ່ຫາກວ່າແມ່ນ ຄວາມ ສະເໝີພາບທາງດ້ານສັງຄົມ ໝາຍຄວາມວ່າ ແມ່ນການພົວພັນແບບສະເໝີ-ພາບກັນ ຕໍ່ ພາຫະນະການຜະລິດ, ແມ່ນການປົດປ່ອຍຊາວຜູ້ອອກແຮງ ງານ ທັງໝົດອອກຈາກການຂູດຮີດແບບສະເໝີພາບກັນ, ການຍົກເລີກກຳມະສິດ

ส่วนติวภ่ຽວກັບພາຫະນະການຜະລິດ ແບບສະຫມີພາບກັນສຳລັບຫມົດທຸກຄົນ ສິດສະຫມີພາບໃນການອອກແຮງງານ ແລະ ສິດສະຫມີພາບໃນການໄດ້ຮັບ ຊັບສິນລ້ຽງຊີວິດຕາມແຮງງານ.

ສະຫລຸບແລ້ວ ສັງຄົມນິຍົມ ບໍ່ຫມາຍເຖິງວ່າ ຈະຕ້ອງມີ ການແຈກຢາຍ ເຄື່ອງຂອງແບບເທົ່າທຽມກັນ ແຕ່ຫາກຫມາຍເຖິງວ່າ ຈະຕ້ອງມີ ການແຈກ ຢາຍຕາມແຮງງານ ທີ່ມີການປະຕິບັດຢູ່ໃນສອງຮູບການຈະແຈ້ງຄື: ໃນຮູບ - ການເປັນເງິນເດືອນຂອງກຳມະກອນ ແລະ ພາລະກອນ ແລະ ໃນຮູບ ການ ເປັນການຈ່າຍຄ່າການອອກແຮງງານ ຢູ່ໃນວິສາຫະກິດແບບນາລວມ -ສະຫະ ກອນ. ການປະຕິບັດກົດເກນແຈກຢາຍຕາມແຮງງານໃນສອງຮູບການ ແມ່ນ ກຳນົດມາຈາກ ການແຕກຕ່າງກັນ ລະຫວ່າງ ສອງຮູບການກຳມະສິດ ຄື : ກຳມະສິດຂອງລັດ ແລະ ກຳມະສິດຂອງສະຫະກອນ-ນາລວມ.

๘. ຄ່າແຮງງານ ຢູ່ໃນລະບອບສັງຄົມນິຍົມ

ທາດແທ້ເນື້ອໃນ ແລະການ ຈັດຕັ້ງຄ່າແຮງງານ

ການມີການຜະລິດສິນຄ້າ ແລະ ມີກົດເກນ ຄຸນຄ່າຢູ່ໃນລະບອບສັງຄົມນິຍົມ ເປັນສາຍ ເຫດທີ່ພາໃຫ້ມີຄວາມຈຳເປັນ ກ່ຽວກັບຮູບ ການຄ່າແຮງງານ ທີ່ຄິດໄລ່ເປັນເງິນ. ຮູບການຄ່າແຮງງານທີ່ຄິດໄລ່ເປັນເງິນ ຊ່ວຍໃຫ້ສາມາດກຳນົດພູດຂອງຜູ້ອອກແຮງງານ ຢູ່ໃນຜະລິດຕະພັນຂອງສັງຄົມ ໄດ້ຢ່າງນັ້ມນວນ ແລະ ຢ່າງມີການຈຳແນກ ໂດຍອີງຕາມຈຳນວນ ແລະ ຄຸນ ນະພາບຂອງການອອກແຮງງານຂ່ອງຜູ້ກ່ຽວ.

ຢູ່ໃນລະບອບສັງຄົມນິຍົມ ແຮງງານບໍ່ເປັນສິນຄ້າ, ບໍ່ມີການຊື້ ແລະ ບໍ່ມີ ການຂາຍໄດ້ ຍ້ອນແນວນີ້ມັນກໍ່ບໍ່ມີຄຸນຄ່າ ແລະ ບໍ່ມີລາຄາ. ຈາກນີ້ຄ່າ ແຮງ ງານກໍ່ບໍ່ແມ່ນຮູບການຄຸນຄ່າ ແລະ ລາຄາຂອງແຮງງານ, ມັນມີບົດບາດເປັນ ຮູບການແຈກຢາຍຊັບສິນທາງດ້ານວັດຖຸຕາມແຮງງານ.

<u>ຄຸນຄ່າແຮງງານຢູ່ໃນລະບອບສັງຄົມນິຍົມ</u>ແມ່ນພູດຜະລິດຕະພັນຂອງສັງຄົມ ທີ່ຄິດໄລ່ອອກມາເປັນເງິນ ເພື່ອເປັນການທົດແທນ ຄ່າຂອງພາກສ່ວນຕົ້ນຕໍ - ຂອງແຮງງານອັນຈຳເປັນ ທີ່ໄດ້ໃຊ້ໄປແລ້ວ, ແມ່ນລັດເປັນຜູ້ເບີກຈ່າຍໃຫ້ຊາວ

ຜູ້ອອກແຮງງານແຕ່ລະຄົນ ທີ່ເຮັດວຽກຢູ່ໃນລັດວິສາຫະກິດສັງຄົມນິຍົມ ໂດຍ ສອດຄ່ອງກັບຈຳນວນ ແລະ ຄຸນນະພາບຂອງແຮງງານ.

ຢູ່ໃນລະບອບສັງຄົມນິຍົມ ລັດແມ່ນສັງຄົມທີ່ເປັນຜູ້ກຳນົດລະດັບຄ່າ ແຮງ ງານ ຢ່າງມີແຜນການ ໂດຍເອົາລະດັບການຜະລິດທີ່ມີຢູ່ໃນຕົວຈິງເປັນ ບ່ອນ ອີງ. ໂດຍມີການຄຳນຶງເຖິງ ສິດຜົນປະໂຫຍດ ຂອງບຸກຄົນ ແລະ ສິດຜົນປະ ໂຫຍດຂອງສັງຄົມ ລັດກຳນົດຂະໜາດໃຫຍ່ນ້ອຍຂອງກອງທຶນການຊຶມໃຊ້ຕາມ ແຮງງານ ທີ່ຖືກສົ່ງເຂົ້າໄປເປັນການຊຶມໃຊ້ສ່ວນຕົວ ບຸກຄົນຂອງຊາວກຳ ມະ ກອນ ແລະ ພາລະກອນພາຍໃຕ້ຮູບການເປັນຄ່າແຮງງານ ແລະ ລັດກໍ່ຍັງກຳ ນົດຈັງຫວະການເຕີບໃຫຍ່ຂະຫຍາຍຕົວ ຂອງກອງທຶນດັ່ງກ່າວ.

ລັດສັງຄົມນິຍົມ ໃຊ້ເປັນໄມ້ງັດອັນໜຶ່ງ ທີ່ສຳຄັນຍິ່ງ ເພື່ອຍົກສູງ ສະມັດ ຖະພາບ ຂອງການອອກແຮງງານ, ເພື່ອເສີມຂະຫຍາຍລະດັບຄວາມຊຳນິຊຳ ນານ ຂອງພວກກຳມະກອນ ກໍ່ເພື່ອຮັບປະກັນແຮງງານໃຫ້ແກ່ຂະແໜງ ການ ຢູ່ໃນເສດຖະກິດແຫ່ງຊາດອັນສຳຄັນກ່ວາໝູ່ ເປັນຕົ້ນຕໍ. ຄ່າແຮງງານ ສ້າງ ເງື່ອນໄຂໃຫ້ສາມາດ ປະສານສົມທົບໄດ້ຢ່າງຖືກຕ້ອງ ລະຫວ່າງ ສິດຜົນປະ ໂຫຍດສ່ວນຕົວ ທາງດ້ານວັດຖຸ ຂອງຊາວຜູ້ອອກແຮງງານ ກັບ ສິດຜົນປະ ໂຫຍດຂອງລັດ ຂອງທ້ອງຖິ່ນ.

ຄ່າແຮງງານຂຶ້ນກັບລະດັບຄວາມຊຳນິຊຳນານຂອງກຳມະກອນ, ລັກສະ ນະ ແລະ ຄວາມສັບສົນຂອງວຽກງານ.

ລະບົບການຄິດໄລ່ຄ່າແຮງງານ ຢູ່ໃນລະບອບສັງຄົມນິຍົມ ຈະຕ້ອງໃຫ້ - ງ່າຍດາຍ ແລະ ຈະແຈ້ງ ກໍ່ໃຫ້ກຳມະກອນ ແລະ ພາລະກອນແຕ່ລະຄົນສາ ມາດເຂົ້າໃຈໄດ້.

ຢູ່ໃນລະບອບສັງຄົມນິຍົມ ພາກສ່ວນປະກອບອັນເປັນພື້ນຖານ ຢູ່ໃນ ການ ຈັດຕັ້ງຄ່າແຮງງານ ແມ່ນການວາງມາດຕະຖານການອອກແຮງງານ ແລະລະ ບອບອັດຕາຄ່າແຮງງານ.

<u>ການວາງມາດຕະຖານການອອກແຮງງານ</u> ແມ່ນການກຳນົດໄລຍະເວລາ ປະຕິບັດວຽກງານໃດໜຶ່ງສະເພາະເຈາະຈົງ ຫລື ການກຳນົດຈຳນວນຜົນ ຂອງທີ່ຜະລິດອອກມາ ໃນໜ່ວຍເວລາ.

ການວາງມາດຕະຖານການອອກແຮງງານ ໃນວິສາຫະກິດສັງຄົມນິຍົມ -

ແຕກຕ່າງກັນ ກັບ ການວາງມາດຕະຖານອອກແຮງງານ ໃນລະບອບທຶນນິຍົມ ໂດຍພື້ນຖານ. ການວາງມາດຕະຖານ ໃນລະບອບທຶນນິຍົມ ເປັນເຄື່ອງມືອັນໜຶ່ງ ທີ່ຮັບໃຊ້ການເພີ່ມກຳໄລສູງ ບົນພື້ນຖານການເພີ່ມທະວີການຂູດຮີດ ກຳມະກອນ.

ການວາງມາດຕະຖານ ການອອກແຮງງານ ໃນສັງຄົມນິຍົມ ແມ່ນພາຫະນະແຫ່ງການຈັດຕັ້ງ ການອອກແຮງງານ ແລະ ການຜະລິດໃຫ້ໄດ້ດີກວ່າເກົ່າ ແລະ ໃຫ້ຕອບສະໜອງກັບຜົນສຳເລັດອັນໃຫຍ່ສຸດ ຂອງວິທະຍາສາດ ແລະ ເຕັກນິກ.

ພື້ນຖານເພື່ອວາງມາດຕະຖານ ໃຫ້ໄດ້ຢ່າງຖືກຕ້ອງ ແມ່ນອີງໃສ່ການຄິດໄລ່ ມາດຕະຖານການຜະລິດທີ່ສົມເຫດສົມຜົນ ທາງດ້ານເຕັກນິກ ແລະໜາກຜົນການຄົ້ນຄ້ວາ ຂອງຜູ້ດີເດັ່ນ ແລະ ຜູ້ປະດິດສ້າງແນວໃໝ່ ໃນການຜະລິດຢ່າງເຕັມສ່ວນກວ່າເກົ່າ. ມາດຕະຖານທີ່ສົມເຫດສົມຜົນທາງດ້ານເຕັກນິກ-ແມ່ນມີການຄົ້ນຄ້ວາວາງອອກມາ ໃນຖານະເປັນກຳນົດໝາຍ ທີ່ມີການ ກ້າວຂະຫຍາຍອັນ ແລະ ມີການຄຳນຶງເຖິງ ຜົນສຳເລັດຂອງຜູ້ດີເດັ່ນໃນການ ຜະລິດ ແຕ່ຜົນສຳເລັດທີ່ປະກົດອອກມາຢ່າງເດັ່ນຊັດ ເປັນບາງກໍລະນີສະເພາະບໍ່ເປັນພື້ນຖານເພື່ອຄິດໄລ ມາດຕະຖານດັ່ງກ່າວ.

ມາດຕະຖານທີ່ມີຄວາມກ້າວໜ້າອັນ ແລະ ສົມເຫດສົມຜົນທາງດ້ານເຕັກນິກ ແມ່ນມີທິດລັ່ງໃສ່ພວກກຳມະກອນ ທີ່ມີສະມັດຖະພາບຂອງການອອກແຮງງານ ໃນລະດັບສູງກວ່າ ລະດັບສ່ວນກາງ. ແຕ່ມັນພັດແມ່ນລະດັບທີ່ກຳມະ - ກອນທຸກຄົນສາມາດປະຕິບັດໄດ້ ດັ່ງນັ້ນມັນຈຶ່ງເປັນມາດຕະຖານທີ່ຕ່ຳທີ່ສຸດ.

ຜ່ານໄລຍະໃດໜຶ່ງ ແຫ່ງການປັບປຸງການຜະລິດ ໃຫ້ກ້າວໜ້າກວ່າເກົ່າ ມາດຕະຖານປະເພດທີ່ສົມເຫດສົມຜົນທາງດ້ານເຕັກນິກ ທີ່ເຄີຍກ້າວໜ້າໃນເມື່ອກ່ອນ ພັດກາຍໄປເປັນ ມາດຕະຖານ ທີ່ຫລ້າສະໄໝໄປ. ຍ້ອນໝວ ມັນຈຶ່ງເກີດມີຄວາມຈຳເປັນ ທີ່ຈະຕ້ອງເບິ່ງມາດຕະຖານຄືນໃໝ່. ການເບິ່ງກຳນົດໝາຍຄືນໃໝ່ ມີຈຸດປະສົງຮັບປະກັນໃຫ້ສະມັດຖະພາບ ຂອງການ ອອກແຮງງານ ເຕີບໃຫຍ່ຂະຫຍາຍຕົວຢ່າງໄວວາກວ່າເກົ່າ ຖ້າປຽບໃສ່ການເຕີບໃຫຍ່ຂະຫຍາຍຕົວ ຂອງຄ່າແຮງງານ ແລະ ການວາງອັດຕາສ່ວນອັນຖືກຕ້ອງ ໃນການຈ່າຍຄ່າແຮງງານ.

ການເບິ່ງມາດຕະຖານການຜະລິດຄົນໃໝ່ ສະແດງເຖິງການປະສານສົມ ທົບກັນລະຫວ່າງ ສິດຜົນປະໂຫຍດ ຂອງສັງຄົມ ກັບສິດຜົນປະໂຫຍດສ່ວນ ຕົວ ຂອງຊາວຜູ້ອອກແຮງງານແຕ່ລະຄົນ ຊຶ່ງແມ່ນຈຸດພິເສດສະເພາະຂອງສັງຄົມນິ ຍົມ .

ລະບອບຄ່າແຮງງານ ມີບົດບາດອັນສຳຄັນໃນການຈັດຕັ້ງຄ່າແຮງງານກຳ ມະກອນຢ່າງຖືກຕ້ອງ.

ໂດຍໃຊ້ລະບອບຄ່າແຮງງານ ລັດສັງຄົມນິຍົມ ຈຳແນກການຈ່າຍຄ່າແຮງ ງານ ໂດຍອີງຕາມລັກສະນະ, ຄຸນນະພາບ ແລ່ະ ເງື່ອນໄຂໃນການປະຕິບັດ ວຽກງານ, ອີງຕາມຂະແໜງການຜະລິດ ແລະ ເຂດບ່ອນຜະລິດຢູ່ໃນປະ - ເທດ ແລະ ອື່ນໆ. ໂດຍສ່ວຍໃຊ້ລະບອບຄ່າແຮງງານ ມັນມີການກວດ ກາ ດັດແກ້ ເງື່ອນເດື່ອນກຳມະກອນ ແລະ ພາລະກອນຢ່າງລວມສູນ.

ລະບອບຄ່າແຮງງານ ປະກອບດ້ວຍພາກສ່ວນປະກອບສາມອັນຄື: ๑)ປັ້ນ ຄິດໄລ່ອັດຕາຕາມລະດັບຄວາມຊຳນິຊຳນານທີ່ໃຊ້ກັນ ເພື່ອກຳນົດປະເພດວຽກ ງານ (ອີງຕາມລະດັບຄວາມສັບສົນຂອງມັນ) ແລະ ຄວາມຊຳນິຊຳນານ - ຂອງກຳມະກອນ, ຢູ່ໃນປັ້ນຫົວດັ່ງກ່າວ ມີການແຍກວຽກງານອອກເປັນ ປະ ເພດ ແລະ ມີການວາງອັດຕາ ຂອງກຳມະກອນ ແຕ່ລະປະເພດຢ່າງເໝາະ ສົມ; ๒) ມາດຕາສ່ວນອັດຕາ ທີ່ແມ່ນຕາຕະລາງ ອັດຕາສ່ວນການຈ່າຍຄ່າ ອອກແຮງງານ ທີ່ມີລະດັບຄວາມຊຳນິຊຳນານ ແຕກຕ່າງກັນ, ຈຳນວນ ປະ ເພດ ແລະ ອັດຕາສ່ວນໃນການຈ່າຍຄ່າແຮງງານ ລະຫວ່າງປະເພດຕ່າງໆ- ແມ່ນກຳນົດອອກມາຈາກຈຸດພິເສດ ລະຍະຕົວຈິງ ຂອງຂະແໜງການຈຸດສຳ ຫະກຳນັ້ນ ຫລື ຂະແໜງການນັ້ນ; ๓) ຂະໜາດອັດຕາ ທີ່ກຳນົດຂະໜາດ ການຈ່າຍຄ່າອອກແຮງງານປະເພດທີ່ໜຶ່ງ.

ເນື່ອງຈາກວ່າການວາງອັດຕາຄ່າແຮງງານຢ່າງຖືກຕ້ອງ ແລະ ການຈຳ ແນກການຈ່າຍຄ່າອອກແຮງງານ ເປັນປັດໄຈຈຸກຍູ້ສົ່ງເສີມອັນສຳຄັນຍິ່ງ ເພື່ອ ຍູ້ໜູນ ສະມັດຖະພາບຂອງການອອກແຮງງານ, ເພື່ອເພີ່ມທະວີລະດັບຄວາມ ຊຳນິຊຳນານ ຂອງຊາວຜູ້ອອກແຮງງານ ໃນວິສາຫະກິດສັງຄົມນິຍົມ,ລະບອບ ຄ່າແຮງງານ ຈຶ່ງມີການປັບປຸງດັດແກ້ ໃຫ້ກ້າວໜ້າຢູ່ເລື້ອຍໆ.

ການສ້າງຄັ້ງ ເງື່ອນເດື່ອນ ມີຄວາມໝາຍສຳຄັນ ໃນການຈັດຕັ້ງ ຄ່າ

ແຮງງານ.

<u>ຄ່າເງິນເດືອນ</u> ແມ່ນມູນຄ່າລວມ ຂອງເງິນເດືອນກຳມກອນແລະພະ ລະກອນ ຊຶ່ງແມ່ນລັດເປັນຜູ້ອາງອອກມາຢ່າງມີແຜນການ ເພື່ອຈຳໜ່າຍຕາມ ແຮງງານ ໃນໄລຍະເວລາໃດໜຶ່ງ (ປີ, ເດືອນ ແລະ ອື່ນໆ). ມີ ການ ຈັດຕັ້ງຄ່າ ດັ່ງກ່າວ ຢູ່ໃນຂັ້ນເສດຖະກິດແຫ່ງຊາດທັງໝົດ, ຢູ່ໃນຂັ້ນ ສາ ທາລະນະລັດ ສະຫະພາບ, ຢູ່ໃນຂັ້ນກະຊວງ ແລະ ທະບວງການ, ຢູ່ ໃນຂັ້ນ ຂະແໜງການ ແລະ ວິສາຫະກິດ.

ຮູບການຈັດຕັ້ງຄ່າແຮງງານ ມີການປ່ຽນແປງ ແລະ ຂະຫຍາຍຕົວ ໄປ ຕາມການຂະຫຍາຍຕົວຂອງສັງຄົມສັງຄົມນິຍົມ.

ສັງດັ່ງກ່າວນັ້ນຊີ້ບອກເຖິງຄວາມຈຳເປັນທີ່ຕ້ອງມີການປັບປຸງລະບອບ ຄ່າ ແຮງງານທັງໝົດ ໃຫ້ກ້າວໜ້າກວ່າເກົ່າ ແລະ ມີການແກ້ໄຂຂໍ້ຂາດຕົກບົກ-ພ່ອງ ທີ່ເກີດຂຶ້ນໃນວຽກງານດັ່ງກ່າວນີ້.

ການປັບປຸງຄ່າແຮງງານໃຫ້ກ້າວໜ້າ ຈະສ້າງເງື່ອນໄຂເພື່ອໝູນໃຊ້ກົດ ເກນ ກ່ຽວກັບການແຈກຢາຍຕາມແຮງງານ ຢ່າງເຕັມສ່ວນກວ່າເກົ່າແລະບົນ ພື້ນຖານດັ່ງກ່າວນີ້ ກໍຈະສາມາດສົ່ງເສີມຫົວຄິດລິເລີ່ມ ປະດິດສ້າງ ແລະ - ຄວາມຕັ້ງໜ້າ ຫ້າວໜັ່ນອອກແຮງງານຂອງກຳມະກອນ ແລະ ພະລະກອນໃນ ການເສີມຂະຫຍາຍ ການຜະລິດສັງຄົມນິຍົມ.

ບັນດາຮູບການ ແລະ ລະບົບຄ່າແຮງງານ	ມີຮູບການຄ່າແຮງງານ ສອງອັນທີ່ເປັນ ພື້ນ ຖານຄື: ຄ່າແຮງງານ ຕາມຜະລິດຕະພັນ- ແລະ ຄ່າແຮງງານ ຕາມເວລາເຮັດວຽກ.

ເມື່ອມີການຈ່າຍຄ່າແຮງງານ ຕາມຜະລິດຕະພັນ ເງິນຄ່າວຽກງານຂອງ ຊາວຜູ້ອອກແຮງງານ ແມ່ນກຳນົດມາຈາກຈຳນວນຜະລິດຕະພັນທີ່ຜະລິດ ອອກ ມາໄດ້. ການຈ່າຍຄ່າແຮງງານ ຕາມຜະລິດຕະພັນ ເປັນເງື່ອນໄຂໃຫ້ ສາ ມາດປະສານສົມທົບໄດ້ ລະຫວ່າງສິດຜົນປະໂຫຍດຂອງສັງຄົມ (ການຍົກສູງ ສະມັດຖະພາບຂອງການອອກແຮງງານ) ກັບ ສິດຜົນປະໂຫຍດສ່ວນຕົວຂອງ ຊາວຜູ້ອອກແຮງງານແຕ່ລະຄົນ (ການເພີ່ມທະວີເງິນເດືອນຂອງສ່ວນຕົວໃຜ ລາວ).

ຢູ່ໃນອຸດສາຫະກຳສັງຄົມນິຍົມ ເພິ່ນເຄີຍໃຊ້ ລະບົບການເບີກຈ່າຍ ຄ່າ ແຮງງານ ຕາມຜະລິດຕະພັນຈຳນວນໜຶ່ງດັ່ງລຸ່ມນີ້:

ກ) ລະບົບການເບີກຈ່າຍຄ່າແຮງງານ ຕາມຜະລິດຕະພັນແບບໂດຍ ກົງ ເມື່ອມີການເບີກຈ່າຍຄ່າຜະລິດຕະພັນ ທີ່ເຮັດອອກມາໄດ້ທັງໝົດໃນອັດຕາ ຄືກັນ;

ຂ) ລະບົບການເບີກຈ່າຍຄ່າແຮງງານ ຕາມຜະລິດຕະພັນ ແບບທະວີຄູນ ແມ່ນການເບີກຈ່າຍ ຄ່າຜະລິດຕະພັນແຕ່ລະອັນ ທີ່ຜະລິດອອກມາໄດ້ສູງ ມາດ ຕະຖານ ໃນອັດຕາທີ່ຢູ່ໃນລະດັບສູງກວ່າ ອັດຕາທີ່ໄດ້ວາງໄວ້ ຕາມມາດ ຕະ ຖານ, ພ້ອມນີ້ ອັດຕາກໍມີການເພີ່ມຂຶ້ນແບບທະວີຄູນ;

ຄ) ລະບົບການເບີກຈ່າຍຄ່າແຮງງານ ຕາມຜະລິດຕະພັນແບບມີການບຳ ເນັດ ແມ່ນ ການເບີກຈ່າຍ ຄ່າຜະລິດຕະພັນທັງໝົດທີ່ເຮັດອອກມາໄດ້ໃນອັດ ຕາທຳມະດາ ແລະ ມີການເບີກຈ່າຍ ຄ່າບຳເນັດໃນກໍລະນີ ມີການປັບປຸງຄຸນ ນະພາບ (ການປະຢັດວັດຖຸດິບ ແລະ ເຊື້ອເພີງ, ການປັບປຸງຄຸນນະ ພາບ ຂອງຜະລິດຕະພັນ ແລະ ອື່ນໆ).

ຢູ່ໃນຄ່າແຮງງານ ຕາມຜະລິດຕະພັນ ມີເງິນເດືອນປະເພດຈ່າຍໃຫ້ ແຕ ລະຄົນ ແລະ ມີເງິນເດືອນປະເພດຈ່າຍໃຫ້ໝວຍງານ.ຈຳນວນເງິນຄ່າວຽກ ງານຂອງແຕ່ລະຄົນ ແບບຈ່າຍຕາມຜະລິດຕະພັນ ຂຶ້ນໂດຍກົງ ກັບຜົນການຜະ ລິດ ຂອງຜູ້ອອກແຮງງານຜູ້ໃດຜູ້ໜຶ່ງສະເພາະ. ໃນກໍລະນີມີການອອກແຮງ ງານເປັນໝວຍງານແບບຈ່າຍຕາມຜະລິດຕະພັນ (ຮູບການນີ້ໃຊ້ສຳລັບວຽກ ງານປະເພດໃດທີ່ບໍ່ສາມາດຈະຄິດໄລ່ຜົນການຜະລິດ ຂອງຊາວຜູ້ອອກແຮງ - ງານແຕ່ລະຄົນ ທັງນີ້ຍ້ອນສະພາບເງື່ອນໄຂຂອງວຽກງານ) ເງິນຄ່າວຽກ ງານກຳມະກອນ ແມ່ນຂຶ້ນບໍ່ສະເພາະແຕ່ກັບໜາກຜົນວຽກງານ ຂອງສ່ວນຕົວ ໃຜລາວເທົ່ານັ້ນ ແຕ່ພັດຍັງຂຶ້ນກັບໜາກຜົນ ວຽກງານຂອງທັງໝົດໝວຍຜະ ລິດ. ເພື່ອໃຫ້ຊາວຜູ້ອອກແຮງງານ ມີຄວາມສົນໃຈກ່ວາເກົ່າ ໃນໜາກຜົນ ການອອກແຮງງານ ຈຶ່ງມີການປະສານສົມທົບກັນລະຫວ່າງ ວິທີການຈ່າຍ ຄ່າ ແຮງງານ ຕາມຜະລິດຕະພັນ ຂອງທັງໝົດໝວຍຜະລິດ ກັບ ວິທີການຈ່າຍ- ຄ່າ ແຮງງານຕາມຜະລິດຕະພັນ ຂອງແຕ່ລະຄົນ. ຈາກນີ້ ໃນເວລາຄິດ ໄລ ຂະໜາດເງິນຄ່າວຽກງານ ຂອງສະມາຊິກແຕ່ລະຄົນຢູ່ໃນໝວຍຜະລິດ ຈຶ່ງມີ

ການຄິດໄລ່ບໍ່ສະເພາະພຽງແຕ່ວ່າຜູ້ກ່ຽວໄດ້ເຮັດວຽກຈັກຊົ່ວໂມງເທົ່ານັ້ນ ແຕ່ກໍ່ຍັງມີການຄິດໄລ່ເບິ່ງລະດັບຄວາມຊໍານິຊໍານານຂອງຜູ້ກ່ຽວອີກ (ອັດຕາຄິດໄລ່ຕາມປະເພດ).

ໄປຄຽງຄູ່ກັບຮູບການຈ່າຍຄ່າແຮງງານ ຕາມຜະລິດຕະພັນ ເພິ່ນກໍ່ຍັງໃຊ້ <u>ຮູບການຈ່າຍຄ່າແຮງງານຕາມເວລາເຮັດວຽກອີກ</u>. ພາຍໃຕ້ຮູບການນີ້ ແມ່ນມີການຈ່າຍຄ່າແຮງງານ ໂດຍອີງຕາມໄລຍະເວລາເຮັດວຽກ ແລະຄວາມຊໍານິຊໍານານ ຂອງຜູ້ອອກແຮງງານ. ເມື່ອມີການໃຊ້ຮູບການຈ່າຍຄ່າແຮງ ງານ ຕາມເວລາເຮັດວຽກ ແມ່ນບໍ່ມີສາຍພົວພັນໂດຍກົງໂລດ ລະຫວ່າງໝາກ ຜົນການອອກແຮງງານ ຂອງຜູ້ອອກແຮງງານ ກັບເງິນເດືອນຂອງຜູ້ກ່ຽວ.

ມີການໃຊ້ຮູບການຈ່າຍຄ່າແຮງງານຕາມເວລາເຮັດວຽກ ສໍາລັບກໍລະ ນີ ວຽກງານໃດທີ່ບໍ່ອາດຈະວາງມາດຕະຖານ ແລະ ຄິດສະເລ່ຍໄດ້. ເພື່ອຍົກ-ສູງບົດບາດ ຊຸກຍູ້ສົ່ງເສີມຂອງຮູບການຈ່າຍຄ່າແຮງງານຕາມເວລາເຮັດວຽກ ຢູ່ ສ.ສ.ສ.ຊ ຈຶ່ງໄດ້ມີການປະຕິບັດລະບອບຈ່າຍຄ່າບໍາເໜັດຕາມເວລາ - ເຮັດວຽກຢ່າງກ້ວາງຂວາງ. ຢູ່ໃນລະບອບດັ່ງກ່າວນີ້ ຈໍານວນເງິນຄ່າ ວຽກ ງານຂອງກໍາມະກອນບໍ່ສະເພາະແຕ່ ກັບ ຈໍານວນເວລາເຮັດວຽກມາແລ້ວ ແລະ ຄວາມຊໍານິຊໍານານ ຂອງຜູ້ອອກແຮງງານເທົ່ານັ້ນ ແຕ່ພົວພັນ ກັບ ໝາກຜົນການອອກແຮງງານ ທາງດ້ານຈໍານວນ ແລະ ຄຸນນະພາບອີກ.

ຍົກຕົວຢ່າງ, ເພິ່ນໝູນໃຊ້ລະບອບຈ່າຍຄ່າບໍາເໜັດຕາມເວລາເຮັດວຽກ ສໍາລັບກໍລະນີ ຈ່າຍຄ່າແຮງງານ ຂອງກໍາມະກອນຜູ້ມີຄວາມຊໍານິຊໍານານ ທີ່ ເຮັດວຽກຕິດຕາມປະຈໍາມື້ປະຈໍາວັນນໍາອຸປະກອນ ຢູ່ໃນຂົງເຂດການຜະລິດ - ບ່ອນມີການປະກອບກົນຈັກ ແລະ ລະບົບອັດຕະໂນມັດ ໃນລະດັບສູງ. ການ ປະກອບກົນຈັກຢ່າງຄົບຊຸດ ແລະ ການປະກອບລະບົບອັດຕະໂນມັດຂໍ້ໆ ໃນ ການຜະລິດ ໄດ້ເຮັດໃຫ້ມີການນໍາໃຊ້ ລະບອບການຈ່າຍຄ່າບໍາເໜັດຕາມ ເວ ລາເຮັດວຽກຫລາຍກວ່າເກົ່າ.

ເພິ່ນໃຊ້ລະບອບຄ່າແຮງງານ ຕາມເວລາເຮັດວຽກ ຢ່າງກ້ວາງຂວາງ-ສໍາລັບຄະນະນໍາວິສາຫະກິດກົມກອງສະວະກອນ, ນັກຕັກນິກຊັ້ນກາງ ແລະ ພາລະກອນ ທີ່ຮັບເງິນເດືອນແບບຄົງຕົວ. ການວາງຈໍານວນເງິນເດືອນແມ່ນ ໃຫ້ສອດຄ່ອງກັບ ກິດເໜດເສດຖະກິດ ກ່ຽວກັບການແຈກຢາຍຕາມແຮງງານ.

ຍັງມີລະບອບການບໍາເນັດເພື່ອຈຸດປະສົງເພີ່ມທະວີຄວາມສົນໃຈທາງດ້ານວັດຖຸ ຂອງພະນັກງານຂັ້ນນໍາ, ພະນັກງານວິສະວະກອນ-ເຕັກນິກ ແລະ ພາລະກອນ. ມີການປະຕິບັດການໃຫ້ບໍາເນັດ ເປັນຕົ້ນແມ່ນໃນກໍລະນີ ປະຕິບັດແຜນການຜະລິດໄດ້ຕາມລະດັບຄາດໝາຍຢ່າງຄົບຖ້ວນ ແລະ ລົ້ນລະດັບຄາດໝາຍ ຕາມບັນຊີລາຍການຜະລິດສິນຄ້າຍ່ອງຕ່າງໆ ທີ ໄດ້ຮັບ ມອບໝາຍ ໂດຍມີການຫລຸດຜ່ອນຕົ້ນທຶນການຜະລິດ.

ການເຕີບໃຫຍ່ຂະຫຍາຍຕົວ ຂອງຄ່າແຮງງານ ແລະລາຍໄດ້ເພື່ອຄອງຊີບ ຢູ່ໃນລະບອບ ສັງຄົມນິຍົມ

ໃນສະຖະກິດສັງຄົມ ນິຍົມ ລະດັບຄ່າແຮງງານ ຄິດໄລ່ເປັນເງິນແມ່ນຕິດພັນຢ່າງສະໜິດແໜ້ນ-ກັບ ການເຕີບໃຫຍ່ຂະຫຍາຍຕົວ ຂອງສະມັດຖະພາບການອອກແຮງງານ. ໃນໄລຍະເວລາທີ ສະມັດຖະພາບການອອກແຮງງານເຕີບໃຫຍ່ຂະຫຍາຍຕົວຄ່າແຮງງານທີ່ຄິດໄລ່ເປັນເງິນ ກໍສູງຂຶ້ນຢ່າງບໍ່ຢຸດຢັ້ງ.

ມາດຕາການທີ ພ.ກ.ส.ຊ ແລະ ລັດຖະບານໂຊວຽດໄດ້ດໍາເນີນ ມາໃນໄລຍະຫລັງນີ້ ໄດ້ເປັນເງື່ອນໄຂສາມາດເພີ່ມທະວີຄ່າແຮງງານຜ້ານ ກາງ ຂຶ້ນໄດ້ ໃນຂະແໜງການອຸດສາຫະກໍາ, ການກໍ່ສ້າງ, ການຂົນສົ່ງ ແລະໃນລັດວິສາຫະກິດກະເສດ. ໄດ້ມີການເພີ່ມຄ່າແຮງງານໃຫ້ຊາວຜູ້ອອກແຮງງານ ໃນຂະແໜງການສຶກສາ, ສາທາລະນະສຸກ, ຂະແໜງການຮັບຜິດຊອບກ່ຽວກັບເຮືອນຊານ ແລະ ເງື່ອນໄຂວິດການເປັນຢູ່, ຂະແໜງການຄ້າ, ຂະແໜງການກິນດື່ມສາທາລະນະຊົນ ແລະ ຂະແໜງການອື່ນໆ ຢູ່ໃນເສດ ຖະກິດແຫ່ງຊາດ ທີ່ເຮັດວຽກຮັບໃຊ້ປະຊາຊົນໂດຍກົງ.

ການໃຊ້ຈ່າຍທີ່ໄດ້ມາຈາກກອງທຶນ ເພື່ອຊຸກຍູ້ສົ່ງເສີມທາງດ້ານວັດຖຸຢູ່ໃນວິສາຫະກິດ ມີຜົນສະທ້ອນຢ່າງໃຫຍ່ຫລວງຕໍ່ວຽກງານປັບປຸງວິດການ ເປັນຢູ່ ທາງດ້ານວັດຖຸຂອງຊາວຜູ້ອອກແຮງງານ ໃຫ້ດີຂຶ້ນກວ່າເກົ່າ. ໃນປີ ໑໙ກ໐ ຄ່າແຮງງານຜ້ານກາງ ຂອງກໍາມະກອນ ແລະ ພາລະກອນຢູ່ ส.ส.ส.ຊ . ຄິດສະເລ່ຍໃສ່ທ້ຽງໜຶ່ງເສດຖະກິດແຫ່ງຊາດ ແມ່ນເທົ່າກັນກັບ ๑๘๘,๐ ຮູບ, ໃນປີ ๑๙ผ๐ ມັນເທົ່າກັບ ๒๐,ผ ຮູບ ໝາຍຄວາມວ່າໄດ້ມີການເພີ່ມຂຶ້ນ -

๕๑% . ໃນປີ ๑๙๒๐ ຄ່າແຮງງານຜ່ານກາງ ໄດ້ເທົ່າກັບ ๑๙๒,๕ ຮຸບ, ໃນປີ ๑๙๒๕ ຄ່າແຮງງານຜ່ານກາງຈະເທົ່າກັບ ๑๙๐-๑๙๕ ຮຸບ.

ມີປັດໄຈອັນໃດແດ ທີ່ພາໃຫ້ເກີດມີການເຕີບໃຫຍ ຂະຫຍາຍຕົວດັ່ງກ່າວ-ນັ ?

ກ່ອນອື່ນໝົດ, ແມ່ນບາດກ້າວຂະຫຍາຍຕົວຢ່າງໜັກແໜ້ນທາງດ້ານ - ໂຄງປະກອບຢູ່ໃນພາກສ່ວນກຳມະກອນ ແລະ ພາລະກອນ. ຜ່ານການ ເຕີບ ໃຫຍຂະຫຍາຍຕົວ ຂອງຄວາມກ້າວໜ້າທາງດ້ານວິທະຍາສາດ- ເຕັກນິກວັດ ຕາສ່ວນພະນັກງານຄົ້ນຄ້ວາວິທະຍາສາດ, ວິສະວະກອນເຕັກນິກ, ກຳມະ - ກອນປະເພດທີ່ມີລະດັບສູງກໍໄດ້ເພີ່ມຂຶ້ນໃນໝູ່ຊາວຜູ້ອອກແຮງງານ ແລະພ້ອມ ກັນນັ້ນວັດຕາສ່ວນພະນັກງານຊັ້ນລຸ່ມກໍຫລຸດໜ້ອຍຖອຍລົງ.ສິ່ງດັ່ງກ່າວພາ ໄປ ເຖິງບ່ອນຄ່າແຮງງານຜ່ານກາງມີການເຕີບໃຫຍ່ຂະຫຍາຍຕົວ.

ອັນທີ່ສອງ, ມີການຫລຸດຜ່ອນຄວາມແຕກຕ່າງກັນ ລະຫວ່າງຄ່າແຮງງານ ຂັ້ນຕ່ຳສຸດ ກັບ ຄ່າແຮງງານຂັ້ນສູງສຸດ,ດ້ວຍວິທີການຍົກສູງຄ່າແຮງງານແລະ ລະດັບວັດຕາຄ່າແຮງງານຂອງພະນັກງານ ຜູ້ທີ່ມີຄ່າແຮງງານໃນລະດັບ ຕ່ຳ ແລະ ລະດັບກາງຂຶ້ນໂດຍກົງ.

ອັນທີ່ສາມ, ຄ່າແຮງງານຂອງກຳມະກອນ ແລະ ພາລະກອນຫລາຍໆຄົນ ມີການເຕີບໃຫຍ່ຂະຫຍາຍຕົວ ຈາກຄ່າບຳເນັດທີ່ຈ່າຍອອກຈາກກຳໄລຂອງ ວິ ສາຫະກິດ ແລະ ສະເພາະພວກກຳມະກອນທີ່ເຮັດວຽກແບບຈ່າຍຕາມ ຜະ ລິດຕະພັນ ແລ້ວຄ່າແຮງງານຂອງພວກເຂົາເຈົ້າມີການເພີ່ມຂຶ້ນຍ້ອນສາຍເຫດ ປະຕິບັດມາດຕະຖານການຜະລິດໄດ້ສົມລະດັບຕາດໝາຍ.

ການເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງຂອງຄ່າແຮງງານ ແມ່ນ ການ ຢັ້ງຢືນໃຫ້ເຫັນຢ່າງຈະແຈ້ງ ທ່າດີເລີດຂອງສັງຄົມນິຍົມ ຕໍ່ ທຶນນິຍົມ. ການ ຕອບສະໜອງຄວາມຮຽກຮ້ອງຕ້ອງການ ທາງດ້ານວັດຖຸ ແລະ ວັດທະນະທຳ ອັນທະວີຄູນຂຶ້ນຢ່າງເປັນປະຈຳ ຂອງຊາວຜູ້ອອກແຮງງານ ຢູ່ໃນລະບອບ ສັງ ຄົມນິຍົມ ແມ່ນສະແດງຕົວອອກມາຢ່າງຄົ້ນຊຶ້ດ ໃນການເຕີບໃຫຍ່ຂະຫຍາຍ-ຕົວຂຶ້ນ ບໍ່ສະເພາະແຕ່ຄ່າແຮງງານທີ່ຄົດໄລ່ເປັນເງິນເທົ່ານັ້ນ ແຕ່ຍັງ ແມ່ນ ໃນການເຕີບໃຫຍ່ຂະຫຍາຍຕົວຂຶ້ນຂອງຄ່າແຮງງານເພື່ອຄອງຊີບອີກ.

<u>ຄ່າແຮງງານເພື່ອຄອງຊີບ</u> ແມ່ນກຳນົດອອກມາຈາກຈຳນວນເຄື່ອງໃຊ້ -

ສອຍ ແລະ ການບໍລິການຕ່າງໆ ຊຶ່ງກຳມະກອນ ແລະ ຄອບຄົວສາມາດເອົາ ເງິນເດືອນທີ່ຄິດໄລ່ເປັນເງິນຂອງຕົນໄປຊື້ມາໄດ້.

ຄັ່ງໄດ້ເວົ້າມາຢູ່ຂ້າງເທິງນີ້ ປັດໄຈອັນສຳຄັນຍິ່ງ ແຫ່ງການເຕີບ ໃຫຍ່ ຂະຫຍາຍຕົວ ຂອງຄ່າແຮງງານເພື່ອຄອງຊີບ ແມ່ນການເພີ່ມທະວີ ຄ່າ ແຮງ ງານ ຜ່ານກາງຄິດໄລ່ເປັນເງິນຂຶ້ນ. ຢູ່ໃນໄລຍະໃດໜຶ່ງສະເພາະເຈາະຈົ່ງ ການຫລຸດຜ່ອນຫລືການຍົກເລີກ ບໍ່ເກັບອາກອນແບບນັ້ນ ຫລື ແບບນຶ່ນຳປະຊາ ຊົນ ກໍ່ອາດຈະມີບົດບາດອັນສຳຄັນຢູ່. ປັດໄຈແຫ່ງການເຕີບໃຫຍ່ຂະຫຍາຍຕົວ ຂອງຄ່າແຮງງານເພື່ອຄອງຊີບ ອັນໜຶ່ງ ທີ່ມີຄວາມສຳຄັນບໍ່ໜ້ອຍກໍ່ຍັງ ແມ່ນ ເລື່ອງວຽກງານ ປັບປຸງການສະໜອງບັນດາຕົວເມືອງ ແລະ ບ້ານກຳມະ - ກອນກ່ຽວກັບສິນຄ້າໃຊ້ສອຍທົ່ວໄປ ໃນລາຄາຄົງຕົວ ໂດຍຜ່ານສາຍການຄ້າ- ຂອງລັດ ແລະ ຂອງສະຫະກອນ. ປັດໄຈດັ່ງກ່າວນີ້ຫັ້ງໝົດລ້ວນແຕ່ເຮັດໃຫ້- ຄ່າແຮງງານຄອງຊີບ ມີການເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ແລະ ເຮັດ ໃຫ້ ລະດັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ວັດທະນະທຳຂອງຊາວ ຜູ້ ອອກແຮງງານ ໄດ້ມີການປັບປຸງໃຫ້ດີຂຶ້ນກວ່າເກົ່າ.

ການເພີ່ມທະວີການຊຸມໃຊ້ສິນຄ້າອັນສຳຄັນຍິ່ງ ຢູ່ໃນຄອບຄົວກຳມະ ກອນ ພາລະກອນ ແລະ ຊາວຜູ້ອອກແຮງງານທັງໝົດ ສະແດງໃຫ້ເຫັນຢ່າງ ຈະ ແຈ້ງວ່າ ຄ່າແຮງງານເພື່ອຄອງຊີບ ເຕີບໃຫຍ່ຂະຫຍາຍຕົວຢູ່ ສ.ສ.ສ.ຊ.

ນັບແຕ່ປີ ໑໙໔໐ ຮອດ ປີ ໑໙໘໐ ການຂາຍສິນຄ້າໃຊ້ສອຍທົ່ວໄປອັນສຳ ຄັນຍິ່ງ ໃຫ້ຊາວຜູ້ອອກແຮງງານ ໂດຍຜ່ານສາຍການຄ້າຂອງລັດ ແລະ ຂອງ ສະຫະກອນ ໄດ້ເພີ່ມຂຶ້ນດັ່ງນີ້: ການຂາຍຊຸ ແລະ ຜະລິດຕະພັນເຮັດ ດ້ວຍ ຊຸ ໄດ້ເພີ່ມຂຶ້ນ ໑໔ ເທື່ອ, ການຂາຍຜະລິດຕະພັນເຮັດດ້ວຍປາ ๑๑ ເທື່ອ, ນ້ຳມັນສັດ -໙,๔ ເທື່ອ, ນ້ຳມັນໝູເອີ້ຍເທື່ອ, ນ້ຳມັນມາກາລິນ ແລະນ້ຳ ມັນຊະນິດອື່ນໆ- ๑໙ ເທື່ອ, ນ້ຳນົມ ແລະ ຜະລິດຕະພັນເຮັດດ້ວຍນ້ຳນົມ - ໙ ເທື່ອ ແລະ ອື່ນໆ. ສະເພາະສິນຄ້າຢູ່ໃນໝວດທີ່ບໍ່ແມ່ນ ສະບຽງອາຫານ ແລ້ວ ການຂາຍໃຫ້ປະຊາຊຸມໃນໄລຍະດຽວກັນນີ້ ໄດ້ເພີ່ມຂຶ້ນທົ່ວໄປ ๑๗, ๔ ເທື່ອ.

ປັດໄຈອັນໜຶ່ງແຫ່ງການເຕີບໃຫຍ່ຂະຫຍາຍຕົວຢ່າງມີແຜນການຂອງ ຄ່າ ແຮງງານເພື່ອຄອງຊີບ ກໍ່ແມ່ນນະໂຍບາຍທັງໝົດ ຂອງລັດສັງຄົມນິຍົມ ກ່ຽວ

ກັບການຫລຸດຜ່ອນອັດຕາອາກອນລາຍໄດ້ທີ່ເກັບນຳປະຊາຊົນ, ເບັຍລ້ຽງເດັກ ນ້ອຍ ຢູ່ໃນຄອບຄົວທີ່ບໍ່ສາມາດມຸ້ງຕົນເອງໄດ້, ການເພີ່ມທະວີອັດຕາເບັຍບຳ ນານ ແລະ ມາດຕະການອື່ນໆ.

ບໍ່ແມ່ນແຕ່ຈຳນວນຄ່າແຮງງານເທົ່ານັ້ນ ທີ່ກຳນົດລະດັບ ຊີວິດການເປັນຢູ່ ຂອງຊາວຜູ້ອອກແຮງງານໃນສັງຄົມນິຍົມ.ຢູ່ໃນລະບອບສັງຄົມນິຍົມຄວາມຮຽກ ຮ້ອງຕ້ອງການຫລາຍແນວຂອງຄົນໄດ້ຮັບການຕອບສະໜອງໂດຍໃຊ້ຄັງເພື່ອ ການຊົມໃຊ້ ຂອງສັງຄົມ.

ມ. ການຈ່າຍຄ່າແຮງງານ ຢູ່ນາລອມ

ການຈ່າຍຄ່າແຮງງານຢູ່ນາລອມ ກໍຄືກັນກັບ ຢູ່ລັດວິສາຫະກິດ ຢູ່ ສ.ສ. ສ.ຊ ລ້ວນແຕ່ປະຕິບັດໄປບົນພື້ນຖານກົດໝາຍສຸດຖະກິດ ກ່ຽວກັບການແຈກ ຢາຍຕາມແຮງງານ ໝາຍຄວາມວ່າ ໂດຍສອດຄ່ອງກັບຈຳນວນ ແລະ ຄຸນນະ ພາບແຮງງານຂອງສະມາຊິກສະຫະກອນແຕ່ລະຄົນ ທີ່ໃຊ້ເຂົ້າໃນການ ຜະລິດ ຂອງສ່ວນລວມ.

ໃນເວລາດຽວກັນນັ້ນ ການຈ່າຍຄ່າແຮງງານຢູ່ນາລອມ ມີຈຸດພິເສດທີ່ນາ ຈາກບ່ອນທີ່ວ່າ ນາລອມ ແມ່ນວິສາຫະກິດສັງຄົມນິຍົມ ທີ່ແຍກຕົວອອກ ຕ່າງ ຫາກ ບົນພື້ນຖານກຳມະສິດ ຂອງສະຫະກອນນາລອມ.

ການຜະລິດຂອງສ່ວນລວມຢູ່ໃນນາລອມ ແມ່ນດຳເນີນໄປບົນພື້ນຖານການ ອອກແຮງງານແບບລວມໝູ ຂອງຊາວນາລອມ. ການອອກແຮງງານ ຂອງ ພວກເຂົາເຈົ້າ ມີການຈັດຕັ້ງຢ່າງມີແຜນການ ແລະ ມັນກໍເປັນພາກສ່ວນ ປະ ກອບອັນໜຶ່ງ ຂອງການອອກແຮງງານລວມຍອດ ຂອງທັງໝົດສັງຄົມ ສັງຄົມ ນິຍົມ.

ໜ້າທີ່ການຜະລິດລວມໝູ, ບໍລິການລາຍໄດ້ ຂອງນາລອມ ແລະ ຄວາມຢູ່ດີກິນດີ ຂອງສະມາຊິກນາລອມແຕ່ລະຄົນ ລ້ວນແຕ່ຂຶ້ນກັບລະດັບຄວາມ ຕັ້ງໜ້າ ທ້າວໜ້ອອກແຮງງານ ຂອງຊາວນາລອມ ແລະ ກັບການຈັດຕັ້ງ - ການອອກແຮງງານຢ່າງຖືກຕ້ອງ ຂອງພວກເຂົາເຈົ້າ.

ກົດໝາຍສຸດຖະກິດກ່ຽວກັບການແຈກຢາຍຕາມແຮງງານ ໄດ້ຮັບການປະ

ຕົບັດເປັນໄລຍະຍາວນານຢູ່ນາລວມ ໂດຍຜ່ານການນຳໃຊ້ວັນງານ. ວັນງານ ແມ່ນມາດຕະການເສດຖະກິດອັນສະເພາະອັນຫນຶ່ງ ທີ່ໃຊ້ກັນ ເພື່ອກຳນົດ ບໍລິ ມາດແຮງງານຂອງສະມາຊິກນາລວມ ທີ່ໃຊ້ເຂົ້າໃນການຜະລິດຂອງສ່ວນລວມ ແລະກຳນົດລະດັບການເຂົ້າຮ່ວມຂອງພວກເຂົາເຈົ້າ ໃນຄັງ ເພື່ອການຊົມ ໃຊ້ຂອງສ່ວນຕົວ. ໂດຍນຳໃຊ້ວັນງານໄດ້ມີການຄິດໄລ່ຈຳນວນ ແລະ ຄຸນນະ ພາບແຮງງານຂອງຊາວນາລວມທີ່ເຮັດວຽກຕ່າງກັນ. ຜ່ານວັນງານ ການ - ອອກແຮງງານຂອງຊາວນາລວມໄດ້ຮັບການຕີລາຄາຈາກມວນຊົນ. ແຕ່ພ້ອມກັນ ນີ້ ວັນງານແມ່ນຫົວຫນ່ວຍວັດແທກການແຈກຢາຍ ລະຫວ່າງຊາວນາລວມກ່ຽວ ກັບພາກສ່ວນລາຍໄດ້ເປັນວັດຖຸ ແລະ ເປັນເງິນຂອງນາລວມ ຊຶ່ງໄດ້ມີ ການ ແຍກຕົວອອກມາເພື່ອແຈກຢາຍຕາມແຮງງານ (ພາຍຫລັງທີ່ໄດ້ມີ ການປະຕິ ບັດ ພາລະຫນ້າທີ່ຕໍ່ລັດ ແລະ ໄດ້ມີການປະກອບຄັງ ຂອງສັງຄົມຢູ່ນາລວມ ແລ້ວ). ໃນນີ້ແຮງງານຊຶ່ງໃຊ້ເຂົ້າໃນການຜະລິດຂອງສ່ວນລວມ ທີ່ນັບເຂົ້າ ໃນວັນງານ ແມ່ນໄດ້ຮັບການເບີກຈ່າຍເປັນວັດຖຸ (ສະບຽງອາຫານ)ແລະ ເປັນເງິນ. ຈຸດພິເສດໃນການຈ່າຍຄ່າວັນງານ ແມ່ນອັດຕາສ່ວນໃນລະດັບສູງ ຂອງການເບີກຈ່າຍເປັນວັດຖຸ.

ມີຄວາມຈຳເປັນທີ່ຈະຕ້ອງໃຊ້ວັນງານກໍ່ຍ້ອນວ່າ ນາລວມບໍ່ມີເງື່ອນໄຂ - ເພື່ອປະຕິບັດລະບອບຈ່າຍຄ່າແຮງງານແບບຮັບປະກັນ. ນາລວມຍັງບໍ່ທັນ ມີ ຄວາມເຂັ້ມແຂງພຽງພໍທາງດ້ານເສດຖະກິດ ເພື່ອຮັບປະກັນໃຫ້ມີຄັງ ອັນ ຈຳເປັນສຳລັບປະຕິບັດການຈ່າຍຄ່າແຮງງານແບບຮັບປະກັນ ໃນອັນຕາໃດ - ຫນຶ່ງ ສະເພາະເຈາະຈົ່ງ ທີ່ໄດ້ວາງໄວ້ລ່ວງຫນ້າແລ້ວ.

ຜ່ານການຂະຫຍາຍຕົວຂອງການຜະລິດຢູ່ນາລວມ ຈຸດອ່ອນຂອງວັນງານກໍ່ ໄດ້ປະກົດຕົວອອກມາໃຫ້ເຫັນ. ຈຸດອ່ອນດັ່ງກ່າວນີ້ ແມ່ນຢູ່ບ່ອນວ່າ ມີການ - ແຈກຢາຍ ສ່ວນເຫລືອຂອງລາຍໄດ້ເປັນວັດຖຸ ແລະ ເປັນເງິນຂອງນາ ລວມ ຕາມວັນງານ. ຍ້ອນແນວນີ້ ໃນເວລາປະຕິບັດວຽກນັ້ນ ຫລື ວຽກນີ້ສະມາຊິກ ນາລວມກໍ່ບໍ່ສາມາດຈະກຳນົດລ່ວງຫນ້າໄດ້ວ່າ ສຸດທ້າຍພວກເຂົາຈະໄດ້ຮັບຄ່າ ແຮງງານຄືແນວໃດ. ມີແຕ່ທ້າຍປີພຸ້ນ ພວກເຂົາເຈົ້າຈຶ່ງຮູ້ຈັກວ່າຕົນຈະໄດ້ຮັບ ຄືແນວໃດ. ສິ່ງດັ່ງກ່າວ ໄດ້ເຮັດໃຫ້ຊາວນາລວມ ຫລຸດຜອນຄວາມສົນໃຈ - ທາງດ້ານວັດຖຸ ຕໍ່ຫມາກຜົນການອອກແຮງງານຂອງພວກເຂົາເຈົ້າ.

ການປັບປຸງການຈັດຕັ້ງການຜະລິດ ແລະ ວິທີການດຳເນີນການຜະລິດ ຢູ່ນາລອມໃຫ້ກ້າວໜ້າກວ່າເກົ່າ, ການເພີ່ມທະວີປະສິດທິພາບການຜະລິດຂອງນາລອມ ແລະ ການເພີ່ມທະວີຜົນກຳໄລຂອງນາລອມ ໄດ້ເປັນພື້ນຖານ ເສດຖະກິດ ເພື່ອຄ່ອຍໆກ້າວຂຶ້ນຈາກການຈ່າຍຕາມວັນງານໄປຫາການເບີກ ຈ່າຍ ຄ່າແຮງງານຂອງຊາວນາລອມເປັນເງິນ.

ໃນເບື້ອງຕົ້ນ ນາລອມຕ່າງໆໄດ້ພາກັນກ້າວຂຶ້ນໃຊ້ການຈ່າຍເງິນ ລ່ວງໜ້າປະຈຳລະດູແລະ ປະຈຳເດືອນໃຫ້ຊາວສະຫະກອນ ໝາຍຄວາມວ່າໄດ້ມີການແຈກຢາຍ ພາກສ່ວນໜຶ່ງຂອງລາຍໄດ້ຕາມວັນງານ ໂດຍບໍ່ຕ້ອງລໍຖ້າ - ການສະຫລຸບການເຄື່ອນໄຫວ ໃນໜຶ່ງປີ. ຕໍ່ມາກໍ່ໄດ້ປ່ຽນການຈ່າຍເງິນລ່ວງໜ້າມາເປັນ ການຈ່າຍຄ່າແຮງງານແບບສະໜ່ຳສະເໝີ ແລະ ແບບຄົງຕົວ ກວ່າເກົ່າ ດ້ວຍສະບຽງອາຫານ ແລະ ເງິນໃນອັດຕາທີ່ໄດ້ວາງໄວ້ລ່ວງໜ້າ ແລ້ວ .

ຢູ່ໃນເງື່ອນໄຂປະຈຸບັນ ການຍົກສູງຜົນກຳໄລຂອງນາລອມ ໄດ້ສ້າງ - ເງື່ອນໄຂ ໃຫ້ເລີ່ມຕົ້ນນຳໃຊ້ ການຈ່າຍຄ່າແຮງງານປະຈຳເດືອນເປັນ ເງິນ ໃຫ້ຊາວນາລອມ. ຮູບການເບີກຈ່າຍເປັນເງິນ ໄດ້ກ້າວໄປເຖິງ ການນຳໃຊ້ ເປັນຫົວໜ່ວຍເອກະພາບໃນການຂຶ້ນບັນຊີ ແລະ ການແຈກຢາຍເຄື່ອງຂອງ.

ໂດຍຮັບປະກັນເຮັດໃຫ້ ຄົງສົ່ງຄົມຂອງຕົນ ມີການເຕີບໃຫຍ່ຂະຫຍາຍ ຕົວຢ່າງເໝາະສົມ ນາລອມແມ່ນຮັບປະກັນໃຫ້ຊາວນາລອມແຕ່ລະຄົນ ໄດ້ຮັບ ເງິນຄ່າແຮງງານໃນລະດັບໃດໜຶ່ງສະເພາະເຈາະຈົ່ງ ທີ່ສອດຄ່ອງກັບ ແຮງ ງານຂອງຜູ້ກ່ຽວ ທີ່ປະກອບເຂົ້າໃນການຜະລິດຂອງນາລອມ. ການຈ່າຍ ຄ່າ ແຮງງານເປັນເງິນແບບຮັບປະກັນໃຫ້ຊາວນາລອມ ຍັງບໍ່ທັນແມ່ນເງິນເດືອນຢູ່ ໃນຄວາມໝາຍຄືກັນກັບ ຢູ່ໃນພາກສ່ວນເສດຖະກິດຂອງລັດ. ແມ່ນລັດທີ່ເປັນ ຜູ້ຮັບປະກັນເງິນເດືອນ ໃຫ້ກຳມະກອນ ແລະ ພາລະກອນ ຢູ່ລັດວິສາຫະ ກິດ ແລະ ຢູ່ໃນອົງການຈັດຕັ້ງອື່ນໆ. ແມ່ນນາລອມເປັນຜູ້ຮັບປະກັນເບີກຈ່າຍ ຄ່າ ແຮງງານເປັນເງິນໃຫ້ຊາວນາລອມ.

ເງິນເດືອນຢູ່ໃນພາກສ່ວນເສດຖະກິດຂອງລັດ ກຳນົດໃຫ້ມີການປະຕິບັດ-ຫລັກການເບີກຈ່າຍເທົ່າກັນ ສຳລັບວຽກງານທີ່ເຮັດເທົ່າກັນຢ່າງສະເໝີ ຕົ້ນ ສະເໝີປາຍ ຢູ່ໃນຂອບເຂດຂອງທັງໝົດເສດຖະກິດແຫ່ງຊາດ, ຢູ່ໃນ ພາກ

ສ່ວນເສດຖະກິດຂອງລັດ ແມ່ນປະຕິບັດຫົວໜ່ວຍເອກະພາບ ໃນການວັດແທກ ການອອກແຮງງານ ແລະ ໃນການແຈກຢາຍ ສຳລັບຊາວຜູ້ອອກແຮງງານ - ໝົດທຸກຄົນ. ການເບີກຈ່າຍຄ່າແຮງງານເປັນເງື່ອນໄຂໃຫ້ຊາວນາລວມ ຮັບປະ-ກັນ ໃຫ້ມີຫົວໜ່ວຍເອກະພາບໃນການວັດແທກການອອກແຮງງານ ແລະການ ແຈກຢາຍ ແຕ່ສະເພາະຢູ່ພາຍໃນນາລວມໃດໜຶ່ງ, ຊຶ່ງຂະໜາດຂອງມັນ ມີ ການແຕກຕ່າງກັນຢ່າງຫລວງຫລາຍ ຢູ່ຕາມເຂດ ແລະ ທ້ອງຖິ່ນຕ່າງໆ ແລະ ສະເພາະໃນບາງກໍລະນີແລ້ວ ມັນກໍແຕກຕ່າງກັນ ຕະຫລອດຮອດສຳລັບ ນາ ລວມທີ່ຕັ້ງຢູ່ໃກ້ຄຽງກັນ.

ການເບີກຈ່າຍຄ່າແຮງງານແບບຮັບປະກັນໃຫ້ຊາວນາລວມ ໄດ້ຮັດ ໃຫ້ ພວກເຂົາເຈົ້າ ມີຄວາມສົນໃຈ ທາງດ້ານວັດຖຸ ໃນການເສີມຂະຫຍາຍ ການ ຜະລິດຂອງສ່ວນລວມເພີ່ມຂຶ້ນຢ່າງຫລວງຫລາຍ. ນອກຈາກເງື່ອນໄຂ ສັ້ນ ພື້ນຖານແລ້ວ ຄວາມສົນໃຈທາງດ້ານວັດຖຸ ຍັງຄາດໝາຍໃຫ້ມີການເບີກຈ່າຍ - ເພີ່ມເຕີມກ່ຽວກັບຄ່າການເພີ່ມທະວີການຜະລິດກະສິກຳ, ການປັບປຸງ ຄຸນນະ ພາບຂອງຜະລິດຕະພັນໃຫ້ດີກວ່າເກົ່າ ແລະ ການຫລຸດຜ່ອນຕົ້ນທຶນການຜະລິດ. ນອກຈາກການເບີກຈ່າຍຕາມແຮງງານແລ້ວ (ອັນພື້ນຖານແລະອັນເພີ່ມເຕີມ) ຊາວນາລວມຍັງຈຸມໃຊ້ ຄັງ ຂອງສັງຄົມເພື່ອການຈຸມໃຊ້ ທີ່ມີການເພີ່ມສູງ ຂຶ້ນໃນແຕ່ລະປີ ອັນນັ້ນເປັນພື້ນຖານເພື່ອຍົກສູງລະດັບຊີວິດທາງດ້ານວັດຖຸແລະ ວັດທະນະທຳຂອງຊາວນາລວມ.

ລະດັບຊີວິດການເປັນຢູ່ ຂອງໝົດທຸກປະເພດຊາວຜູ້ອອກແຮງງານ ແມ່ນ ສູງຂຶ້ນຢ່າງບໍ່ຢຸດຢັ້ງ ບົນພື້ນຖານການເສີມຂະຫຍາຍການຜະລິດຂອງສັງຄົມ . ມີການປະຕິບັດຄຳຂວັນຂອງ ພ.ກ.ສ.ຊ ທີ່ລັກສະນະເປັນໂຄງການ ວ່າ "ໝົດທຸກສິ່ງທຸກຢ່າງເພື່ອມະນຸດ,ເພື່ອຄວາມຢູ່ດີກິນດີຂອງມະນຸດ" ຢ່າງເຕັມ ສ່ວນ ແລະ ຢ່າງສະເໝີຕົ້ນສະເໝີປາຍກວ່າເກົ່າ.

๔. ຄັງຂອງສັງຄົມເພື່ອການຈຸມໃຊ້

ການແຈກຢາຍຄວາມຮັ່ງມີທາງດ້ານວັດຖຸ ແລະ ຈິດໃຈຕາມຄຳນວນແລະ ຄຸນນະພາບຂອງແຮງງານຢູ່ໃນລະບອບສັງຄົມນິຍົມ ແມ່ນຮູບການແຈກຢາຍອັນ

ສຳຄັນ ແຕ່ມັນກໍ່ບໍ່ແມ່ນຮູບການແຈກຢາຍອັນຫນຶ່ງອັນດຽວເທົ່ານັ້ນ. ພາກສ່ວນ ໃຫຍ່ຂອງຄວາມຮຽກຮ້ອງຕ້ອງການທາງດ້ານວັດຖຸ ແລະ ຈິດໃຈຂອງຊາວ ຜູ້ ອອກແຮງງານ່ ໄດ້ມີການຕອບສະຫນອງຈາກຄັງ ຂອງສັງຄົມເພື່ອການຊົມ ໃຊ້ .

<u>ຄັງ ຂອງສັງຄົມ ເພື່ອການຊົມໃຊ້</u> - ແມ່ນພາກສ່ວນຫນຶ່ງ ຂອງຄັງ ເພື່ອການຊົມໃຊ້ຂອງສັງຄົມສັງຄົມນິຍົມທີ່ລັດກໍ່ຄົບັນດາວິສາຫະກິດຂອງລັດແລະ ຂອງສະຫະກອນ-ນາລວມນຳໃຊ້ເປັນເງິນແລະເປັນວັດຖຸເພື່ອຕອບສະຫນອງ ຄວາມຮຽກຮ້ອງຕ້ອງການຂອງຫນ່ວຍງານແລະ ຂອງສ່ວນຕົວຢູ່ໃນສັງຄົມໂດຍ ທົ່ວໄປແລ້ວ ສ່ວນຫລາຍກໍ່ແມ່ນບໍ່ຂຶ້ນກັບຫມາກຜົນວຽກງານຂອງພວກເຂົາເຈົ້າ.

ຄັງ ຂອງສັງຄົມ ເພື່ອການຊົມໃຊ້ ສ່ອງແສງເຖິງການພົວພັນລະຫວ່າງ ທັງຫມົດສັງຄົມ, ຫນ່ວຍງານ ແລະ ບຸກຄົນໃດຫນຶ່ງສະເພາະຢູ່ໃນສັງຄົມກ່ຽວ ກັບພາກສ່ວນລາຍໄດ້ແຫ່ງຊາດ ທີ່ເຂົ້າມາເປັນການຊົມໃຊ້ຂອງສ່ວນຕົວ. ຄັງ ດັ່ງກ່າວນີ້ ແນໃສ່ຮັບປະກັນ ໃຫ້ລັດສັງຄົມນິຍົມມີການກະທົບຢ່າງມີແຜນການ ໃສ່ການປະກອບສ້າງ ໂຄງປະກອບລາຍຈ່າຍ ແລະ ການຊົມໃຊ້ຂອງປະ ຊາ ຊົນ ເພື່ອຮັບໃຊ້ວຽກງານ ເຮັດໃຫ້ຖານະທາງດ້ານສັງຄົມ-ເສດຖະກິດ ຂອງ ຄົນຢູ່ໃນສັງຄົມ ຄ່ອຍໆມີການຫລຸດຜ່ອນໄລຍະຫ່າງເຫີນ ແລະ ໄລຍະຫລຸດລົ້ນ ກັນລົງ .

ຄັງ ຂອງສັງຄົມ ເພື່ອຊົມໃຊ້ສຳລັບທຸກຊັ້ນຄົນ ສ້າງໃຫ້ເກີດມີຄວາມ - ອາດສາມາດສຶກສາຮ່ຳຮຽນ ໃນລະດັບທີ່ເຫມາະສົມ, ຊົມໃຊ້ຄວາມຮັ່ງມີທາງ ດ້ານວັດທະນະທຳຂອງຊາດ, ເສີມຂະຫຍາຍຄວາມສາມາດຂອງຕົນ**ແລະຈາກ** ນີ້ກໍ່ແມ່ນມີຖານະຢູ່ໃນການຜະລິດສັງຄົມນິຍົມ ແລະ ຢູ່ໃນສັງຄົມອັນສອດ ຄ່ອງ ກັບຄວາມສາມາດດັ່ງກ່າວນີ້.

ຄັງ ຂອງສັງຄົມ ເພື່ອການຊົມໃຊ້ ແບ່ງອອກເປັນສອງພາກສ່ວນຄື : ພາກສ່ວນທີຫນຶ່ງ -ແມ່ນຄັງ ທີ່ປະກອບເຂົ້າເປັນລາຍໄດ້ຂອງປະຊາຊົນພົນ ລະເມືອງ (ເງິນອຸດຫນູນ, ເບ້ຍບຳນານ, ເບ້ຍລ້ຽງ, ເງິນຄ່າຈ່າຍໄປພັກ ຜ່ອນ ແລະ ອື່ນໆ) ແລະເປັນບໍ່ເກີດແຫ່ງການຊົມໃຊ້ສ່ວນຕົວ. ພາກສ່ວນ ຄັງ ຂອງສັງຄົມ ອັນນີ້ ຍັງຮັກສາຮ່ອງຮອຍບາງແນວ ຂອງການແຈກ ຢາຍ ຕາມແຮງງານ. ຕົວຢ່າງ, ມັນມີການໃຊ້ຈ່າຍ ແລະ ມີການປະຕິບັດ ນະໂຍ

ບາຍບາງແນວຕໍ່ຊາວຜູ້ອອກແຮງງານໂດຍຂຶ້ນກັບຂະໜາດເງິນລ່ວງໜ້າ-ຂອງພວກເຂົາເຈົ້າ ໃນລະດັບໃດລະດັບໜຶ່ງ (ຍົກຕົວຢ່າງ, ເບ້ຍບຳນານ ຂຶ້ນກັບເງິນເດືອນ).

ພາກສ່ວນທີສອງແມ່ນຄັງ ທີ່ໃຊ້ເຂົ້າເພື່ອຕອບສະໜອງຄວາມ ຮຽກຮ້ອງຕ້ອງການລວມຂອງສັງຄົມ ຢ່າງບໍ່ມີການຫົດແຫນລ່ວງໜ້າ (ການສຶກສາ , ສາທາລະນະສຸກ, ການຮັບໃຊ້ທາງດ້ານວຽກງານວັດທະນະທຳ, ການອຸມໃຊ້ ເຮືອນຢູ່ແບບມີນະໂຍບາຍ ແລະ ອື່ນໆ). ມີການແຈກຢາຍພາກສ່ວນ ຄັງ ຂອງສັງຄົມ ອັນນີ້ໂດຍບໍ່ຂຶ້ນກັບການເຂົ້າຮ່ວມໃນການອອກແຮງງານ, ຄັງ ອັນນີ້ ຊາວ ຜູ້ອອກແຮງງານໜຶ່ງຫຼືກຄົນເປັນຜູ້ອຸມໃຊ້.

ພາກສ່ວນໃຫຍ່ຂອງ ຂອງຄັງ ສັງຄົມ ເພື່ອການອຸມໃຊ້ ແມ່ນໄດ້ ມາ ຈາກລັດ ເປັນຕົ້ນແມ່ນພາຍໃຕ້ຮູບການເປັນລາຍຈ່າຍຂອງງົບປະມານແຫ່ງລັດ ອີກຜູດໜຶ່ງ ທີ່ບໍ່ຫລວງຫລາຍປານໃດ ແມ່ນໄດ້ມາຈາກລາຍຈ່າຍຂອງວິສາຫະ ກິດ (ສຳພັນວິສາຫະກິດ) ອອກຈາກຄັງ ເພື່ອຮັບໃຊ້ວຽກງານສັງຄົມ - ວັດທະນະທຳ ແລະ ວຽກງານກໍ່ສ້າງເຮືອນຢູ່. ຢູ່ໃນນາລວມ ການປະ ກອບ ຄັງ ເພື່ອຮັບໃຊ້ວຽກງານວັດທະນະທຳປະຈຳວັນ, ຄັງ ເພື່ອສະຫວັດດີ ພາບ ແລະ ເພື່ອຊ່ວຍເຫລືອຊາວນາລວມທາງດ້ານວັດຖຸ ແມ່ນໄດ້ມາຈາກ - ພາກສ່ວນໜຶ່ງຂອງລາຍໄດ້ສົດ.

ຜ່ານການກໍ່ສ້າງສັງຄົມນິຍົມ ຄວາມຮຽກຮ້ອງຕ້ອງການທີ່ໄດ້ຮັບການຕອບ ສະໜອງຢ່າງເຕັມສ່ວນ ຫລື ເປັນພາກສ່ວນ ຈາກຄັງ ຂອງສັງຄົມ ເພື່ອ ການອຸມໃຊ້ນັ້ນ ກໍ້ກ້ວາງຂວາງອອກໄປຕື່ມຢ່າງບໍ່ຢຸດຢັ້ງ. ສິ່ງດັ່ງກ່າວນີ້ ແມ່ນ ຕິດພັນກັບການເປີດກ້ວາງຄວາມອາດສາມາດຂອງສັງຄົມ ສັງຄົມນິຍົມ ຂະ ຫຍາຍຕົວໃນການຕອບສະໜອງຄວາມຮຽກຮ້ອງຕ້ອງການອັນຫະວີລຸມໍ້ນຂອງ ຊາວຜູ້ອອກແຮງງານໄດ້ຢ່າງເຕັມສ່ວນກວ່າເກົ່າ.

ຄັງ ຂອງສັງຄົມເພື່ອການອຸມໃຊ້ຢູ່ ສ.ສ.ສ.ຊ ໃນປີ ໑໙໔໐ ໄດ້ ມີ ๔,๒ ຕຣຸບ, ໃນປີ ໑໙๗໐-໑໑๒,๔ ຕຣຸບ.ໃນປີ ໑໙๗๔ ຄັງຂອງ ສັງຄົມເພື່ອການອຸມໃຊ້ຈະເທົ່າກັນກັບ ໑໓๗ ຕຣຸບ ໝາຍຄວາມວ່າ ມັນ ຈະ ເພີ່ມຂຶ້ນ ๘๐%. ໃນປີ ໑໙๔໐ ການໃຊ້ຈ່າຍແລະການປະຕິບັດນະໂຍບາຍທາງ ດ້ານການເງິນໂດຍເອົາອອກຈາກ ຄັງ ຂອງສັງຄົມ ຄິດສະເລ່ຍໃສ່ຫົວຄົນ

ເທົ່າກັນກັບ ๘๔ ຮຸບ ແຕ່ມາໃນປີ ๑๙๓๐ ມັນເທົ່າກັນກັບ ๔๗๓ ຮຸບ ໝາຍ ຄວາມວ່າ ມັນໄດ້ເພີ່ມຂຶ້ນຫລາຍກວ່າ ๑๒ ເທື່ອ. ໃນປີ ๑๙๓๔ ການໃຊ້ - ຈ່າຍ ແລະ ການປະຕິບັດນະໂຍບາຍ ທາງດ້ານການເງິນ ໂດຍເອົາອອກ - ຈາກຄັງ ຂອງສັງຄົມ ເພື່ອການອຸມໃຊ້ ຈະເທົ່າກັນກັບປະມານ ๕๐๐ ຮຸບ.

ໃນສະເພາະໜ້າ ຄັງ ຂອງສັງຄົມເພື່ອການອຸມໃຊ້ ກໍ່ຈະຂະ ຫຍາຍ ຕົວຂຶ້ນ ໄປເປັນຂອງລະບອບກອມມູນິດ. ໃນນີ້ໂຄງປະກອບ ແລະ ຮຸບ ການ ແຈກຢາຍຄັງ ດັ່ງກ່າວ ຈະມີການປ່ຽນແປງ. ໂດຍໃຊ້ຄັງ ດັ່ງກ່າວ ນີ້ ຈະມີການຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຄົນທີ່ຈະຮັ່ງມີຂຶ້ນ ຕື່ມ ຈົນວັດແທກບໍ່ໄດ້, ຈິດໃຈລອມໜູກໍ່ຈະປົ່ງດອກອອກໃບ ຢູ່ໃນການຕອບສະ- ໜອງຄວາມຮຽກຮ້ອງຕ້ອງການອັນນີ້.

ສຳລັບສ່ວນໃຫຍ່ຂອງຊາວຜູ້ອອກແຮງງານແລ້ວ ການໃຊ້ຈ່າຍ ແລະການ ປະຕິບັດນະໂຍບາຍ ທີ່ເອົາອອກຈາກຄັງ ຂອງສັງຄົມ ເພື່ອການອຸມ ໃຊ້ ແມ່ນການເພີ່ມເຕີມໃສ່ລາຍໄດ້ພື້ນຖານທີ່ໄດ້ຮັບມາ ໂດຍສອດຄ່ອງກັບຈຳນວນ ແລະ ຄຸນນະພາບຂອງການອອກແຮງງານ. ເພີ່ມລາຍໄດ້ເພື່ອຄ່ອງຊຸບ ຂອງ ກຳມະກອນ ແລະ ພາລະກອນຂັ້ນໜຶ່ງສ່ວນສີ່.

ທັງໝົດລະບົບສາຍໄຍແຫ່ງຄວາມຮັ່ງມີ ທາງດ້ານວັດຖຸເພື່ອລ້ຽງຊຸບ ທີ່ ຊາວຜູ້ອອກແຮງງານໄດ້ຮັບ ພາຍໃຕ້ຮຸບການ ການເບີກຈ່າຍຄ່າອອກແຮງ - ງານຂອງ ພວກເຂົາເຈົ້າ ໂດຍສອດຄ່ອງກັບ ຈຳນວນ ແລະ ຄຸນນະພາບ - ຂອງແຮງງານ, ເປັນການໃຊ້ຈ່າຍ ແລະ ການປະຕິບັດນະໂຍບາຍ ທີ່ເອົາ ອອກຈາກຄັງ ຂອງສັງຄົມ ເພື່ອການອຸມໃຊ້, ເປັນລາຍໄດ້ຈາກເສດ ຖະ ກິດສຳຮອງ ທັງໝົດເຫລົ່ານີ້ ລ້ວນແຕ່ສະແດງໃຫ້ເຫັນລະດັບລາຍໄດ້ ເພື່ອ ຄ່ອງຊຸບ ຂອງປະຊາຊົນພົນລະເມືອງ. ຢູ່ໃນລະບອບສັງຄົມນິຍົມ ລາຍ ໄດ້ ຂອງຊາວຜູ້ອອກແຮງງານ ແມ່ນເພີ່ມຂຶ້ນຢ່າງເປັນປະຈຳ. ຍົກຕົວຢ່າງ ໃນປີ ๑๙๕๐ ຖ້າສົມທຽບໃສ່ປີ ๑๙๔๐ ລາຍໄດ້ເພື່ອຄ່ອງຊຸບຂອງກຳມະກອນ ແລະ ພາລະກອນຢູ່ ส.ส.ส.ช ຄິດສະເລ່ຍໃສ່ຄົນຜູ້ຮັດວຽກງານຜູ້ໜຶ່ງໄດ້ເພີ່ມ ຂຶ້ນ ๔ ເທື່ອ, ສະເພາະລາຍໄດ້ເພື່ອຄ່ອງຊຸບ ຂອງຊາວນາລອມໝຸມ ໄດ້ ເພີ່ມຂຶ້ນ ๘,๙ ເທື່ອ. ໃນໄລຍະຫລັງນີ້ ໄດ້ມີການຫລຸດຜ່ອນລະດັບຄວາມແຕກ ຕ່າງກັນ ລະຫວ່າງລາຍໄດ້ເພື່ອຄ່ອງຊຸບຂອງຊາວນາລອມ ກັບ ລາຍໄດ້ເພື່ອ

ຄອງຊີບຂອງກຳມະກອນ ແລະ ພາລະກອນຢູ່ ສ.ສ.ສ.ຊ.

ຄຳຖານເພື່ອທວນຄືນ

ຈ. ທາດແທ້ເນື້ອໃນຂອງກົດເກນເສດຖະກິດກ່ຽວກັບການແຈກຢາຍຕາມແຮງງານ ມີຫຍັງແດ່ ?

ຄ. ເປັນຫຍັງຈຶ່ງຈຳເປັນຕ້ອງໃຫ້ຊາວຜູ້ອອກແຮງງານໃນສັງຄົມນິຍົມມີຄວາມສົນໃຈໂດຍສ່ວນຕົວ ທາງດ້ານວັດຖຸ ໃນຫມາກຜົນການອອກແຮງງານ - ຂອງຕົນ ?

ຈ. ຕາມລັດທິມາກ-ເລນິນແລ້ວ ຄວາມສະເຫມີພາບແມ່ນຫຍັງ ?

ຄ. ທາດແທ້ເນື້ອໃນຂອງ ຄ່າແຮງງານ ໃນລະບອບສັງຄົມນິຍົມມີຫຍັງແດ່ ?

ຕ. ຈົ່ງສະເຫນີຈຸດພິເສດສະເພາະ ຂອງຄ່າແຮງງານຕາມຜະລິດຕະພັນແລະ ຕາມເວລາເຮັດວຽກ, ຂອງຄ່າແຮງງານເປັນເງິນສົດ ແລະ ຄ່າ ແຮງງານເພື່ອຄອງຊີບ.

ຜ. ການເບີກຈ່າຍຕາມແຮງງານມີຄືແນວໃດຢູ່ນາລວມ ?

ກ. ຄັງ ຂອງສັງຄົມ ເພື່ອການຊົມໃຊ້ແມ່ນຫຍັງ ?

ພາກ ສິບຫ້າ

ການເຄື່ອນໄຫວເສດຖະກິດແບບດຸນດ່ຽງແລະມີຜົນກຳໄລ ແລະ ການມີຜົນກຳໄລ. ການໃຊ້ຈ່າຍໃນການຜະລິດ ແລະລະບົບລາຄາ

ການຫມູນໃຊ້ກິດເກນເສດຖະກິດ ເຂົ້າໃນການຜະລິດສັງຄົມນິຍົມມີຫລາຍຮູບຫລາຍສີແຕກຕ່າງກັນ. ໃນນັ້ນຮູບການທີ່ມີບົດບາດສຳຄັນ ແມ່ນ ຮູບ ການເຄື່ອນໄຫວເສດຖະກິດແບບດຸນດ່ຽງ ແລະ ມີຜົນກຳໄລ ຊຶ່ງແມ່ນວິທີການຊຸ້ນຳວິສາຫະກິດ (ສຳພັນວິສາຫະກິດ) ສັງຄົມນິຍົມຢ່າງມີແຜນການ.ມາດຕະເກນດັ່ງຕໍ່ໄປນີ້: ຕົ້ນທຶນການຜະລິດ, ກຳໄລ, ການມີຜົນກຳໄລ,ລາຄາແລະມາດຕະເກນອື່ນໆ ແມ່ນຕິດພັນໂດຍກົງກັບ ການເຄື່ອນໄຫວ ເສດຖະກິດແບບ ດຸນດ່ຽງ ແລະ ມີຜົນກຳໄລ. ການນຳໃຊ້ມາດຕະເກນດັ່ງກ່າວນີ້ ເປັນເງື່ອນໄຂໃຫ້ສາມາດສ້າງການພົວພັນລະຫວ່າງ ສັງຄົມ ກັບ ຕ່ອງໂສ້ທີ່ເຄື່ອນໄຫວເສດຖະກິດແບບດຸນດ່ຽງ ແລະ ມີຜົນກຳໄລ ເພື່ອຮັດແໜ້ນໃຫ້ມີການຍົກສູງປະສິດທິພາບຂອງການຜະລິດ, ໃຫ້ເຫັນໄດ້ໜ້າທີ່ຜົນການເຄື່ອນໄຫວເສດຖະກິດຂອງວິສາຫະກິດ (ສະຫະບໍລິສັດ), ໃຫ້ປະຕິບັດການແບ່ງປັນລາຍຮັບຂອງ

ວິສາຫະກິດ ແລະ ໃຫ້ຊຸກຍູ້ສົ່ງເສີມ ທາງດ້ານວັດຖຸຜູ້ທີ່ເຮັດວຽກຜະລິດ.

๑. ທາດແທ້ເນື້ອໃນ ແລະ ຫລັກການຈັດຕັ້ງການເຄື່ອນໄຫວເສດຖະກິດແບບຖຸນດ່ຽງ ແລະ ມີຜົນກຳໄລ

ຕ່ອງໂສ້ຂັ້ນພື້ນຖານໃນການຜະລິດຂອງສັງຄົມ ທີ່ມີການເຄື່ອນໄຫວ-ເສດຖະກິດແບບຖຸນດ່ຽງ ແລະ ມີຜົນກຳໄລ

ເສດຖະກິດແຫ່ງຊາດ ສັງຄົມນິຍົມ ແມ່ນກົງຈັກການຜະລິດອັນສັບສົນທີ່ ປະກອບດ້ວຍຈຸລັງການຜະລິດເປັນ ຈຳນວນຫລວງຫລາຍ ທີ່ມີການພົວ ພັນອີ່ງກັນແລະກັນ. ຕ່ອງໂສ້ ຂັ້ນ ທຳອິດ ທີ່ໃນເວລາດຽວກັນນັ້ນກໍເປັນທັງຕ່ອງໂສ້ການຜະລິດຂັ້ນພື້ນຖານ ຢູ່ໃນ ເສດຖະກິດແຫ່ງຊາດນັ້ນແມ່ນວິສາຫະກິດ (ສຳພັນວິສາຫະກິດ).

ອີງຕາມຈຸດພິເສດທາງດ້ານສັງຄົມ-ເສດຖະກິດຂອງມັນ ວິສາຫະກິດ ສັງຄົມນິຍົມ ແບ່ງອອກເປັນວິສາຫະກິດຂອງລັດ ແລະ ວິສາຫະກິດຂອງລວມ ໝູ ອີງຕາມຈຸດພິເສດ ທາງດ້ານຂະແໜງການ ມີການແບ່ງອອກເປັນ ວິສາ ຫະ ກິດ ອຸດສາຫະກຳ, ວິສາຫະກິດກໍ່ສ້າງ, ວິສາຫະກິດຂົນສົ່ງ ແລະສື່ສານ, ວິ ສາຫະກິດສະໜອງທາງດ້ານວັດຖຸ-ເຕັກນິກ, ວິສາຫະກິດຈຳໜ່າຍ, ວິສາ-ຫະກິດການຄ້າ, ວິສາຫະກິດການກິນດື່ມສາທາລະນະຊົນ, ວິສາຫະກິດບໍລິ - ການໃນຊີວິດປະຈຳວັນ ແລະ ອື່ນໆ.

ໃນວິສາຫະກິດມີການຜະລິດສຳ ກຳລັງການຜະລິດ ແລະ ການພົວພັນ - ແຫ່ງການຜະລິດ. ຍ້ອນແນວນັ້ນວິສາຫະກິດຈຶ່ງມີບົດບາດເປັນລະບົບເອກະ ພາບ ທາງດ້ານການຈັດຕັ້ງ-ເຕັກນິກ ແລະ ທາງດ້ານເສດຖະກິດ-ສັງຄົມ. ວິ ສາ ຫະກິດແມ່ນ ຕ່ອງໂສ້ຂັ້ນທຳອິດ ໃນໂຄງປະກອບເສດຖະກິດແຫ່ງຊາດ, ແມ່ນ ຢູ່ ວິສາຫະກິດທີ່ມີການຕິດພັນລະຫວ່າງແຮງງານຄົນ ກັບພາຫະນະການຜະລິດ, ວິສາຫະກິດແມ່ນຈຸດເລີ່ມຕົ້ນ ຂອງການປ່ຽນແປງໜົດທຸກອັນ ທີ່ມີຢູ່ໃນດ້ານ - ຄວາມກ້າວໜ້າທາງດ້ານເຕັກນິກ, ແມ່ນວິສາຫະກິດ ທີ່ປະຕິບັດພາລະໜ້າທີ່ ໃດໜຶ່ງສະເພາະເຈາະຈົ່ງ ໃນລະບົບການແບ່ງງານຢູ່ໃນສັງຄົມ.

ພ້ອມກັນນັ້ນວິສາຫະກິດກໍມີບົດບາດເປັນຈຸລັງຂອງສັງຄົມ. ດ້ານໜຶ່ງ ວິສາ

ຫະກິດ ແມ່ນພາກສ່ວນອັນຫນຶ່ງ ຂອງກຳມະສິດທີ່ວປວງຊົນ ແລະ ສິດຜົນ ປະ
ໂຫຍດ ຂອງວິສາຫະກິດກໍ່ສອດຄ່ອງ ກັບ ສິດຜົນປະໂຫຍດຂອງທີ່ວປວງຊົນ .
ແຕ່ອີກດ້ານຫນຶ່ງ, ວິສາຫະກິດກໍ່ມີສິດຜົນປະໂຫຍດອັນສະເພາະຂອງມັນເອງ-
ທັງນີ້ກໍ່ຍ້ອນວ່າ ວິສາຫະກິດ ທີ່ມີຫນ້າທີ່ຜະລິດເຄື່ອງໃດຫນຶ່ງ ທີ່ສັງຄົມຕ້ອງ -
ການນັ້ນພັດໄດ້ຖືກລັດຜູ້ເປັນເຈົ້າຂອງພາຫະນະການຜະລິດມອບຫມາຍພາ ຫະ
ນະການຜະລິດດັ່ງກ່າວນີ້ໃຫ້ ເພື່ອຫມູນໃຊ້ ແລະ ຊົມໃຊ້.

ໂດຍນຳໃຊ້ຊັບສິນຂອງລັດ ທີ່ຕົນໄດ້ຮັບມອບຫມາຍນັ້ນ ລັດວິສາຫະກິດສັງ
ຄົມນິຍົມ (ສຳພັນວິສາຫະກິດ) ແມ່ນດຳເນີນການເຄື່ອນໄຫວເສດຖະກິດ -
ການຜະລິດ (ການຜະລິດ, ການປະຕິບັດວຽກງານ, ການບໍລິການ) ໂດຍ
ສອດຄ່ອງກັບ ແຜນການພັດທະນາເສດຖະກິດແຫ່ງຊາດ, ລັດວິສາຫະກິດ ມີ
ການດຸນດຽງສະເພາະຕ່າງຫາກຂອງຕົນເອງ ແລະ ກໍ່ເປັນນິຕິບຸກຄົນ.

ບັນດາ ວິສາຫະກິດສັງຄົມນິຍົມ ມີລັກສະນະເປັນເອກະລາດ ໃນລະ ດັບ
ໃດ ລະດັບຫນຶ່ງ ທາງດ້ານເສດຖະກິດ. ບັນດາວິສາຫະກິດດັ່ງກ່າວ ປະ ຕິ
ບັດສິດທິໃນການຊົມໃຊ້, ການເປັນເຈົ້າຂອງ ແລະ ການຫມູນໃຊ້ຊັບສິນທີ່ລັດ
ໄດ້ກຳນົດມອບໃຫ້, ລາຍຮັບແລະລາຍຈ່າຍຂອງວິສາຫະກິດແຕ່ລະບ່ອນ ມີການ
ແຍກຕົວອອກຕ່າງຫາກ ໃນລະດັບອັນແນ່ນອນ ຈາກລາຍຮັບ ແລະ ລາຍຈ່າຍ
ຂອງວິສາຫະກິດບ່ອນອື່ນໆ ແລະ ຂອງລັດ. ພາກສ່ວນຫນຶ່ງຂອງລາຍຮັບຂອງ
ວິສາຫະກິດ ແມ່ນຖືກປະໄວ້ໃຫ້ວິສາຫະກິດຊົມໃຊ້ ແລະ ມັນກໍ່ຖືກນຳໃຊ້ ເພື່ອ
ເສີມຂະຫຍາຍການຜະລິດ, ເພື່ອຊຸກຍູ້ສິ່ງເສີ່ມທາງດ້ານວັດຖຸ ແລະ ເພື່ອປັບ
ປຸງເງື່ອນໄຂທາງດ້ານວັດທະນະທຳ ແລະ ຊີວິດປະຈຳວັນຂອງຊາວຜູ້ ອອກ
ແຮງງານໃຫ້ດີຂຶ້ນກວ່າເກົ່າ. ວິສາຫະກິດບໍ່ຮັບຜິດຊອບຕໍ່ພັນທະຂອງອົງ ການ
ຈັດຕັ້ງບ່ອນຕົນຂຶ້ນນຳ ກໍ່ຄືບໍ່ຮັບຜິດຊອບຕໍ່ພັນທະຂອງວິສາຫະກິດ ແລະອົງການ
ຈັດຕັ້ງອື່ນໆ. ພ້ອມກັນນີ້ ອົງການຈັດຕັ້ງຂັ້ນເທິງບ່ອນວິສາຫະກິດຂຶ້ນນຳນັ້ນຍົກ
ຕົວຢ່າງ, ກະຊວງ, ກໍ່ບໍ່ຮັບຜິດຊອບຕໍ່ ພັນທະຂອງວິສາຫະກິດ.

ຄວາມກ້າວຫນ້າທາງດ້ານວິທະຍາສາດ-ເຕັກນິກ ແມ່ນໄປຄຽງຄູ່ກັນ ກັບ
ການເພີ່ມຂະຫນາດຂອງວິສາຫະກິດຂຶ້ນຕື່ມ. ໃນໄລຍະຫລັງມານີ້ ວິສາຫະກິດ
ຫລາຍໆບ່ອນ ກໍ່ໄດ້ທ້ອນໂຮມກັນເຂົ້າເປັນຕຣັດ,ກົມບິນາ (ການທ້ອນໂຮມ ວິ
ສາຫະກິດ ອຸດສາຫະກຳ ທີ່ຢູ່ໃນຂະແຫນງການແຕກຕ່າງກັນ) ບໍລິສັດ, ສະ

ຫະບໍລິສັດການຜະລິດ ສົມທົບມີການຄົ້ນຄວ້າວິທະຍາສາດກັບທີ່. ໂດຍສອດ - ຄ່ອງກັບ "ກົດລະບຽບວ່າດ້ວຍລັດວິສາຫະກິດການຜະລິດສັງຄົມນິຍົມ" ກົມບີນາ ຕຣັດ, ບໍລິສັດ, ສາໍພັນວິສາຫະກິດ ຫລືວ່າ ອົງການຈັດຕັ້ງເສດຖະກິດ ໃດ ຫນຶ່ງອີກ ທີ່ປະກອບມີຫນ່ວຍການຜະລິດ ປະເພດບໍ່ເປັນວິສາຫະກິດສະ ເພາະ ຕ່າງຫາກນັ້ນ ລ້ວນແຕ່ມີການເຄື່ອນໄຫວໃນຖານະເປັນ ວິສາຫະກິດການ ຜະ ລິດ.

ເມື່ອວິສາຫະກິດການຜະລິດສັງຄົມນິຍົມ ຫາກເປັນຕ່ອງໂສ້ຂັ້ນທາໍອິດຢູ່ໃນ ເສດຖະກິດແຫ່ງຊາດ ໃນເວລາດຽວກັນນັ້ນ ມັນກໍ່ເປັນທັງຫນ່ວຍງານພື້ນຖານ ທີ່ດາໍເນີນການຜະລິດຢູ່ໃນສັງຄົມ.

ຢູ່ໃນລະບອບທຶນນິຍົມ ສິດຜົນປະໂຫຍດ ຂອງຊາວຜູ້ອອກແຮງງານ ແມ່ນ ມີການຂັດແຍ່ງແບບເປັນປໍລະປັກກັນ ກັບ ສິດຜົນປະໂຫຍດຂອງພວກເຈົ້າຂອງ ພາຫະນະການຜະລິດທີ່ມຸ່ງຫມາຍຢາກເພີ່ມການຂູດຮີດຊາວຜູ້ອອກແຮງງານ . ຍ້ອນແນວນີ້ ວິສາຫະກິດທຶນນິຍົມຈົ່ງບໍ່ເປັນຫນ່ວຍງານເອກະພາບທີ່ດາໍເນີນ - ການຜະລິດ ໂດຍມີສິດຜົນປະໂຫຍດເປັນເອກະພາບກັນໄດ້. ມີແຕ່ຢູ່ໃນສັງຄົມ ສັງຄົມນິຍົມເທົ່ານັ້ນ ໃນເມື່ອຊາວຜູ້ອອກແຮງງານ ເປັນທັງເຈົ້າຂອງ ພາຫະ ນະການຜະລິດແລະທັງການຜະລິດກໍ່ແມ່ນດາໍເນີນໄປເພື່ອຮັບໃຊ້ຕອບສະຫນອງ ຄວາມຮຽກຮ້ອງຕ້ອງການ ອັນນັບມື້ນັບທະວີຄູນຂຶ້ນ ຂອງຫມົດທຸກຄົນຢູ່ໃນ ສັງ ຄົມນັ້ນ ວິສາຫະກິດຈົ່ງມີບົດບາດເປັນເອກະພາບອັນດຽວທີ່ດາໍເນີນການຜະລິດ ແລະຢູ່ໃນຫນ່ວຍງານດັ່ງກ່າວ ສະມາຊິກທຸກຄົນ ກໍ່ມີສິດຜົນປະໂຫຍດເປັນ ເອ ກະພາບກັນ .

ຢູ່ໃນເງື່ອນໄຂແຫ່ງການຢູ່ລວມຫມູ່ ການພົວພັນລະຫວ່າງຊາວຜູ້ອອກ - ແຮງງານນາໍກັນ ມີລັກສະນະແບບຮ່ວມມືຖານເພື່ອນສະຫາຍ ແລະ ຊ່ວຍເຫຼືອ ຊຶ່ງກັນແລະກັນ ແບບສັງຄົມນິຍົມ. ການເຮັດວຽກງານໃນຫນ່ວຍງານ,ສິດຜົນ ປະໂຫຍດລວມ ແລະ ເປົ້າຫມາຍເປັນເອກະພາບ ລ້ວນແຕ່ເປັນການປຸກ ລະ ດົມຊຸກຍູ້ຊາວຜູ້ອອກແຮງງານ ໃຫ້ມີຫົວຄິດປະດິດສ້າງ, ມີຫົວຄິດລິເລີ່ມ ແລະ ມີການເປີດຂະບວນການ ໃນການອອກແຮງງານ, ໃຫ້ພ້ອມກັນຊອກຄົ້ນ ຫາ ຄວາມອາດສາມາດບີ່ມຊ້ອນໄວ້ໃນການຜະລິດ ແລະ ໃຫ້ນາໍໃຊ້ຫມົດທຸກຄວາມ ອາດສາມາດຢ່າງສຸດຂີດ ເພື່ອໃຫ້ໄດ້ຮັບຫມາກຜົນອັນດີເລີດ ໃນການເຄື່ອນ-

ໄຫວພະລິດ. ແຕ່ການພົວພັນແບບລວມໝູ່ ບໍ່ຈັກເທື່ອ ທີ່ຈະເປັນຮູບເປັນ - ເປັນຮ່າງຂຶ້ນມາໄດ້ໃນຕົວມັນເອງ. ອາດຈະຖືວ່າໝ່ວຍງານ ອັນແທ້ຈິງ ໄດ້ ປະກົດຕົວຂຶ້ນຢ່າງສົມບູນໄດ້ ກໍ່ຕໍ່ເມື່ອວ່າຄວາມເຫັນຂອງສ່ວນລວມຫາກ ກາຍ ເປັນກຳລັງແຮງທີ່ມີພົນສັກສິດ ແລະ ຊາວຜູ້ອອກແຮງງານ ພາກັນເຂົ້າຮ່ວມ- ຢ່າງຕັ້ງໜ້າ ຫ້າວຫັນໃນການແກ້ໄຂໜ້າທ່ວຽກງານທີ່ຕົ່ງຂຶ້ນຕໍ່ໝ່ວຍງານ - ແລະ ທັງຊ່ວຍເຫລືອຊຶ່ງກັນແລະກັນນຳອີກ.

ຢູ່ໃນວິສາຫະກິດສັງຄົມນິຍົມ ມີການສ້າງເງື່ອນໄຂອັນຈຳເປັນຂຶ້ນເພື່ອດຶງ ດູດເອົາກຳມະກອນ ແລະ ພາລະກອນເຂົ້າຮ່ວມຢ່າງກ້ວາງຂວາງໃນການແກ້ ໄຂບັນຫາຕ່າງໆ ທີ່ກ່ຽວຂ້ອງກັບການຜະລິດ. ບັນດາອົງການຈັດຕັ້ງມະຫາຊົນ ແລະ ທັງໝົດໝ່ວຍງານໃນວິສາຫະກິດ ເຂົ້າຮ່ວມຢ່າງກ້ວາງຂວາງໃນການ ພິຈາລະນາ ແລະ ປະຕິບັດມາດຕະການທີ່ແນໃສ່ ຮັບປະກັນການປະຕິບັດແຜນ ການແຫ່ງລັດ, ເສີມຂະຫຍາຍ ແລະ ປັບປຸງການເຄື່ອນໄຫວເສດຖະກິດການ ຜະລິດ ຂອງວິສາຫະກິດໃຫ້ກ້າວໜ້າກວ່າເກົ່າ, ປັບປຸງເງື່ອນໄຂໃນການ - ອອກແຮງງານ ແລະ ຊີວິດການເປັນຢູ່ ຂອງຊາວຜູ້ອອກແຮງງານໃຫ້ດີຂຶ້ນ - ກວ່າເກົ່າ. ຢູ່ກອງປະຊຸມຊາວຜູ້ອອກແຮງງານໃນວິສາຫະກິດ ໄດ້ພິຈາ ລະ ນາໂຄງຮ່າງແຜນການ ການຜະລິດ, ຜົນສະຫລຸບການປະຕິບັດແຜນການ ດັ່ງ ກ່າວ, ໂຄງຮ່າງຂໍ້ຜູກພັນລວມໝູ່ ແລະ ການປະຕິບັດພັນທະຕາມຂໍ້ຜູກພັນດັ່ງ ກ່າວໃນພາກຕົວຈິງ, ບັນຫາຕ່າງໆກ່ຽວກັບການຜະລິດ, ການບໍລິການຊາວຜູ້ ອອກແຮງງານ ທາງດ້ານວີວິດປະຈຳວັນ ແລະ ດ້ານວັດທະນະທຳ ແລະອື່ນໆ.

ການເພີ່ມທະວີນ້ຳໃຈຮັບຜິດຊອບຂອງແຕ່ລະຄົນໃນໝ່ວຍງານ ຕໍ່ ການ ເຄື່ອນໄຫວຂອງໝ່ວຍງານ ແມ່ນໜຶ່ງໃນບັນດາໜ້າທີ່ອັນສຳຄັນຍິ່ງຂອງວຽກ ງານສຶກສາອົບຮົມຢູ່ວິສາຫະກິດ. ຕະຫລອດໃນໄລຍະທຳອິດຂອງວຳນາດ ໂຊ ວຽດ ວ.ອິ.ເລນິນ ເຄີຍໄດ້ເນັ້ນຢ້ຳວ່າ "ບັນຫາແມ່ນຕົ້ວຢ່ນຢູ່ບ່ອນວ່າ ເຮັດ ແນວໃດໃຫ້ກຳມະກອນຜູ້ມີຄວາມຕື່ນຕົວ ມີຄວາມຮູ້ສຶກວ່າ ຕົນເປັນເຈົ້າຂອງບ່ ສະເພາະແຕ່ໂຮງງານຂອງຕົນເທົ່ານັ້ນ.. ແຕ່ຕົນກ໋ຍັງ ເປັນຕົວແທນຂອງ ປະ ເທດຊາດອີກ ແລະ ເຮັດແນວໃດ ໃຫ້ຜູ້ກ່ຽວຮູ້ສຶກມີຄວາມຮັບຜິດຊອບ ". ๑)

---

๑) ວ.ອິ.ເລນິນ.ນິພົນຄົບຊຸດ,ເຫລັ້ມ ๓๒, ໜ້າ ๓๒๗-๓๓๐ .

ຢູ່ໃນເງື່ອນໄຂຂອງສັງຄົມນິຍົມ ໄປຄຽງຄູ່ກັບສິດຜົນປະໂຫຍດສ່ວນຕົວ ທາງ ດ້ານວັດຖຸ ຂອງຊາວຜູ້ອອກແຮງງານ ທີ່ສັງກັດຢູ່ໃນໜ່ວຍງານແລ້ວ ກະໂຕ ໜ່ວຍງານ ທີ່ດຳເນີນການຜະລິດກໍ່ຍັງມີສິດຜົນປະໂຫຍດທາງດ້ານວັດຖຸ ສ່ວນ ລວມຂອງໜ່ວຍງານອີກດ້ວຍ. ສິ່ງດັ່ງກ່າວພາໃຫ້ເກີດມີຈຸດພົ້ນເສດ ໃດໜຶ່ງ ໂດຍສະເພາະໃນການພົວພັນລະຫວ່າງວິສາຫະກິດນຳກັນ ແລະ ໃນການພົວ-ພັນຂອງວິສາຫະກິດກັບສັງຄົມທັງໝົດ. ຈຸດພົ້ນເສດດັ່ງກ່າວນີ້ ໄດ້ປະກົດຕົວ ອອກມາ ໃນການເຄື່ອນໄຫວຂອງເສດຖະກິດ ແບບດຸນດ່ຽງ ມີພົ້ນກຳໄລ.

ການປະຕິວັດທາງດ້ານວິທະຍາສາດ-ເຕັກນິກ, ຂະໜາດການຜະລິດອັນ ນັບມື້ນັບຂະຫຍາຍອອກຕື່ມ, ການສືບຕໍ່ປັບປຸງການຈຸ້ມຄອງໃຫ້ກ້າວໜ້າ ກວ່າ ເກົ່າໄດ້ຕັ້ງບັນຫາກ່ຽວກັບຄວາມຈຳເປັນໃນການຈັດຕັ້ງຕ່ອງໂສ້ຂັ້ນທຳອິດ ຂຶ້ນ ໃໝ່ ນັ້ນລ້ວນແຕ່ການປັບປຸງວິສາຫະກິດໃຫ້ເຂັ້ມແຂງ, ບັນຫາການສ້າງ ຕັ້ງ ສຳພັນວິສາຫະກິດຮ້ອນຮົນສັ່ນສະເທືອນດັ່ງກ່າວນີ້ (ກົມບິນ) ນີ້ແມ່ນຮູບການຈັດຕັ້ງ ການຜະລິດອັນກ້າວໜ້າ ທີ່ສ້າງເງື່ອນໄຂໃຫ້ປະຕິບັດການຕ້ຳໂຮມການ ຜະ ລິດ, ການແບ່ງເຂດຜະລິດ ແລະ ໃຫ້ສາມາດນຳເອົາຄວາມກ້າວໜ້າ ທາງ ດ້ານວິທະຍາສາດ-ເຕັກນິກເຂົ້າສູ່ວິສາຫະກິດຢ່າງເລິ່ງລັດ. ສຳພັນວິສາຫະ-ກິດ ສາມາດນຳໃຊ້ພະນັກງານຜູ້ມີຄວາມຊຳນິຊຳນານ ແລະ ຊັບພະຍາກອນ ທາງດ້ານວັດຖຸຢ່າງຖືກຕ້ອງເໝາະສົມກວ່າເກົ່າ, ແລະ ມີຄວາມອາດສາ ມາດຢ່າງໃຫຍ່ຫລວງ ເພື່ອຈະສຶກສາຄົ້ນຄ້ວາຄວາມຕ້ອງການ ຕໍ່ຜະລິດຕະພັນ ໃນໄລຍະປະຈຸບັນ, ໃນສະເພາະໜ້າ ແລະ ອື່ນໆ.

ສຳພັນວິສາຫະກິດປະກອບມີ ວິສາຫະກິດທີ່ດຳເນີນການຜະລິດ ຜະລິດຕະ ພັນປະເພດຄ້ອນກັນ ຫລື ວິສາຫະກິດທີ່ພົວພັນນຳກັນ ທາງດ້ານ ເຕັກໂນໂລຢີ ການຜະລິດ. ມີການຈັດຕັ້ງ ສຳພັນວິສາຫະກິດຮ້ອນ ຢູ່ໃນຂອບເຂດຂອງທ້ອປະ ເທດ ກໍ່ຢູ່ໃນຂອບເຂດຂອງເສດຖະກິດແຫ່ງໜຶ່ງ. ນອກຈາກນັ້ນດ້ວິສາຫະ ກິດ ການຜະລິດແລ້ວ ມັນກໍ່ອາດຈະມີສະຖາບັນຄົ້ນຄ້ວາວິທະຍາສາດ ແລະອົງ ການຈັດຕັ້ງວາງແຜນ-ອອກແບບຕ່າງໆອີກ, ທີ່ປະກອບເຂົ້າຢູ່ໃນສຳພັນວິ ສາ ຫະກິດ ໂດຍສົມທົບການຄົ້ນຄ້ວາວິທະຍາສາດຢູ່ກັບທີ່. ສິ່ງດັ່ງກ່າວ ສ້າງ - ເງື່ອນໄຂໃຫ້ໜ່ວຍໃຊ້ຜົນສຳເລັດທາງດ້ານວິທະຍາສາດເຂົ້າໃນການຜະລິດໄດ້ ຢ່າງເລິ່ງລັດ.

ນອກຈາກສຳພັນວິສາຫະກິດ (ກົມບີນາ) ແລ້ວ ພາຍໃຕ້ລະບອບ ການ ຄຸ້ມຄອງແບບສາມຂັ້ນ ກໍ່ຍັງມີການຈັດຕັ້ງສຳພັນວິສາຫະກິດອຸດສາຫະກຳຂັ້ນທົ່ວ ສະຫະພາບ (ຂັ້ນສາທາລະນະລັດ) ຂັ້ນອີກ. ສຳພັນວິສາຫະກິດອຸດສາ ຫະ ກຳ ຂັ້ນທົ່ວສະຫະພາບ ແມ່ນລະບົບສະດຖະກິດ ການຜະລິດອະກະພາບ ທີ່ປະ ກອບດ້ວຍ ບັນດາສຳພັນວິສາຫະກິດ (ກົມບີນາ) ບັນດາວິສາຫະກິດ ອຸດສາ ຫະກຳ, ບັນດາອົງການຈັດຕັ້ງຄົ້ນຄວ້າວິທະຍາສາດ ແລະ ວາງແຜນ- ອອກ ແບບ. ພາກສ່ວນປະກອບດັ່ງກ່າວ ລ້ວນແຕ່ພາກັນຊົມໃຊ້ຊັບພະຍາກອນທາງ- ດ້ານວັດຖຸ, ການເງິນ ແລະ ແຮງງານຂອງທັງຫມົດລະບົບການຜະລິດ ແລະ ກໍ່ຮັບປະກັນເຮັດໃຫ້ລະບົບການຜະລິດຄື່ອນໄຫວວຽກງານແບບບໍ່ຫລຸບທົ່ນ. ໃນ ເມື່ອສຳພັນວິສາຫະກິດອຸດສາຫະກຳ ຫາກເປັນອົງການຈັດຕັ້ງ ທີ່ມີການຄື່ອນ ໄຫວເສດຖະກິດແບບດຸນດ່ຽງ ແລະ ມີຜົນກຳໄລ ດັ່ງນັ້ນ ມັນຈົ່ງມີ ບົດບາດ ເປັນອົງການຄຸ້ມຄອງເສດຖະກິດ ແລະ ຕ້ອງປະຕິບັດພາລະຫນ້າທີ່ຫລາຍໆອັນ ທີ່ກະຊວງເປັນຜູ້ຮັບຜິດຊອບໃນປະຈຸບັນນີ້.

ມີການເລີ່ມຕົ້ນນຳໃຊ້ບັນດາຫລັກການຄື່ອນໄຫວເສດຖະກິດແບບດຸນດ່ຽງ ແລະ ມີຜົນກຳໄລ ຢູ່ໃນການຈັດຕັ້ງ ການຄື່ອນໄຫວຂອງບັນດາກະຊວງທີ່ ຊີ້ ນຳຂະແຫນງການ. ບັນດາກະຊວງດັ່ງກ່າວ ຈະຕ້ອງຮັບປະກັນທາງດ້ານເສດ ຖະກິດຊັ່ນດຽວກັນ ຕໍ່ຫມາກຜົນການຄື່ອນໄຫວຂອງຕົນ ແລະ ກໍ່ຍັງຕ້ອງ ມີ ຄວາມສົນໃຈທາງດ້ານວັດຖຸ ເພື່ອປັບປຸງການຄື່ອນໄຫວຂອງຕົນ ໃຫ້ດີກວ່າ- ເກົ່າ. ຄືແນວນີ້ ຈົ່ງມີການຈັດຕັ້ງ ລະບອບການຄຸ້ມຄອງອຸດສາຫະກຳ ບົນພື້ນ ຖານ ການຄື່ອນໄຫວເສດຖະກິດ ແບບດຸ່ນດ່ຽງ ແລະ ມີຜົນກຳໄລ ແບບເອ ກະພາບ ທີ່ມີສອງຂັ້ນ ແລະ ມີສາມຂັ້ນຄື: ກະຊວງ -ສຳພັນວິສາຫະກິດ (ວິ ສາຫະກິດ) ແລະ ກະຊວງ ສຳພັນວິສາຫະກິດອຸດສາຫະກຳ- ສຳພັນວິ ສາ ຫະກິດການຜະລິດ (ວິສາຫະກິດ).

ທາດແທ້ເນື້ອໃນແລະຫລັກການຈັດຕັ້ງ ຕ່ອງໂສ້ຂັ້ນທຳອິດໃນໂຄງປະກອບ-
ການເຄື່ອນໄຫວເສດຖະກິດແບບ (ວິສາຫະກິດການຜະລິດ,ຕຣັດ,ກົມ
ດຸນດ່ຽງ ແລະ ມີຜົນກຳໄລ ບົນາ, ສຳພັນວິສາຫະກິດ) ແມ່ນຈຸ
ລັງທີ່ມີການພົວພັນຊຶ່ງກັນ ແລະ ກັນ
ຂອງເສດຖະກິດສັງຄົມນິຍົມອະກະພາບ ທີ່ດຳເນີນໄປຢ່າງມີການຈັດຕັ້ງ ແລະ ມີແຜນການ.

ການເຄື່ອນໄຫວເສດຖະກິດແບບດຸນດ່ຽງແລະມີຜົນກຳໄລ ແມ່ນມາດຕະ ຖານເສດຖະກິດ ພາວະວິໄສຂອງສັງຄົມນິຍົມ ທີ່ແມ່ນລະບົບການພົວພັນ ເສດ ຖະກິດລະຫວ່າງທັງຫມົດສັງຄົມ ກັບ ຕ່ອງໂສ້ເສດຖະກິດຂອງມັນ, ລະຫວ່າງ ກະໂຕຕ່ອງໂສ້ເສດຖະກິດນຳກັນ ກໍ່ຄືລະຫວ່າງຕ່ອງໂສ້ດັ່ງກ່າວນີ້ກັບພາກສ່ວນ ຢູ່ພາຍໃນຂອງມັນເອງ. ຜ່ານການເຄື່ອນໄຫວເສດຖະກິດແບບດຸນດ່ຽງ ແລະ ມີຜົນກຳໄລ ຈຶ່ງມີການປະຕິບັດຄວາມເປັນເອກະພາບ ທາງດ້ານສິດຜົນ ປະ ໂຫຍດ ລະຫວ່າງບັນດາ ຫນ່ວຍງານຢູ່ວິສາຫະກິດ ກັບ ສັງຄົມ, ຈຶ່ງມີການ ຮັບປະກັນໃຫ້ມີການຈັດຕັ້ງເສດຖະກິດແຫ່ງຊາດຢ່າງມີແຜນການ. ເວົ້າ ໂດຍ ກົງແລ້ວ ການເຄື່ອນໄຫວເສດຖະກິດແບບດຸນດ່ຽງ ແລະ ມີຜົນກຳໄລ ຫມາຍ ເຖິງ ການເຄື່ອນໄຫວເສດຖະກິດ ແບບມີການຄິດໄລ່. ແຕ່ບັນຫາການຄິດໄລ່ ກໍ່ມີອັນແຕກຕ່າງກັນ, ຕົວຢ່າງ, ການເຄື່ອນໄຫວແບບມີການຄິດໄລ່ຂອງນາຍ ທຶນ ແມ່ນເຮັດໃຫ້ມີກຳໄລສ່ວນຕົວ, ເຮັດໃຫ້ພວກນາຍທຶນຮັ່ງມີ ດ້ວຍວິທີການ ຂູດຮີດແຮງງານຂອງຜູ້ອື່ນ.

ຢູ່ໃນລະບອບສັງຄົມນິຍົມ ການເຄື່ອນໄຫວແບບມີການຄິດໄລ່ ບໍ່ມີຫຍັງ - ຄ້າຍຄືກັນເລີຍ ກັບການເຄື່ອນໄຫວແບບມີການຄິດໄລ່ຂອງນາຍທຶນ.ມັນບໍ່ແມ່ນ ກຳນົດອອກມາຈາກສິດຜົນປະໂຫຍດສ່ວນຕົວທີ່ແນໃສ່ເຮັດໃຫ້ບຸກຄົນໃດຫນຶ່ງ ມີ ຜົນໄດ້ ແຕ່ມັນຫາກແມ່ນກຳນົດອອກມາຈາກສິດຜົນປະໂຫຍດຂອງທັງຫມົດ ສັງ ຄົມ. ຢູ່ໃນລະບອບສັງຄົມນິຍົມ ມີຄວາມອາດສາມາດ ແລະ ທັງມີຄວາມ ຈຳ ເປັນທີ່ຈະຕ້ອງເຄື່ອນໄຫວເສດຖະກິດແບບດຸນດ່ຽງ ແລະ ມີຜົນກຳໄລ ຢູ່ ໃນ ແຕ່ລະວິສາຫະກິດໃດຫນຶ່ງສະເພາະ ທີ່ມີຈຸດປະສົງຢາກໄດ້ຮັບຫມາກຜົນອັນ ດີ ເລີດໃນການດຳເນີນການຜະລິດສັງຄົມນິຍົມທັງຫມົດ ໂດຍໃຫ້ມີການໃຊ້ ຈ່າຍ ໃນລະດັບຕຳ່ສຸດ.

ການເຄື່ອນໄຫວເສດຖະກິດແບບຖຸມດ່ຽງ ແລະ ມີຜົນກຳໄລກໍ່ຍັງແມ່ນວິທີ ການດຳເນີນການເຄື່ອນໄຫວເສດຖະກິດຢ່າງມີແຜນການ ຢູ່ວິສາຫະກິດສັງຄົມ ນິຍົມ ຊຶ່ງຕ້ອງຢູ່ບົນພື້ນຖານຫລັກການໃຫ້ມີຄວາມສາມາດສົມທຽບ ອອກມາເປັນ ເງິນໄດ້ ລະຫວ່າງການໃຊ້ຈ່າຍເຂົ້າໃນການຜະລິດ ກັບ ຫມາກຜົນການ - ເຄື່ອນໄຫວເສດຖະກິດ, ໃຫ້ມີການຫົດແທນຄ່າໃຊ້ຈ່າຍຂອງວິສາຫະກິດ ໂດຍ ໃຊ້ລາຍຮັບສ່ວນຕົວສະເພາະ ຂອງວິສາຫະກິດ ແລະ ໃຫ້ການຜະລິດ ມີ ຜົນ ກຳໄລ. ການເພີ່ມທະວີການເຄື່ອນໄຫວເສດຖະກິດແບບຖຸມດ່ຽງແລະມີຜົນກຳ ໄລຢ່າງສູດຂີດ, ການໄປຖືງບ່ອນມີການປະຢັດ ແລະ ມັດທະຍັດ ຢ່າງຂັ້ນ ງວດທີ່ສຸດ, ການຫລຸດຜ່ອນບໍ່ໃຫ້ມີການຕົກຣ່ຽເສຍຫາຍ, ການຫລຸດຜ່ອນຕົ້ນ ທຶນການຜະລິດ ແລະ ການຍົກສູງຜົນກຳໄລຂອງການຜະລິດ ແມ່ນໜ້າທີ່ອັນ-ສຳຄັນຍິ່ງ ໃນການເຄື່ອນໄຫວເສດຖະກິດສັງຄົມນິຍົມ.

ຮູບການຄິດໄລ່ເປັນເງິນ ເຮັດໃຫ້ມີຄວາມອາດສາມາດຮັບປະກັນໃຫ້ ມີ ການຂຶ້ນບັນຊີການຜະລິດ, ມີການວາງແຜນການ ແລະ ມີການກວດກາ ການ ໃຊ້ຈ່າຍແຮງງານ "ເປັນ" ແລະ ແຮງງານເປັນວັດຖຸ, ຕົ້ນທຶນການຜະ ລິດ ລາຄາ ແລະ ເງົ່ອການມີຜົນກຳໄລ ຂອງແຕ່ລະວິສາຫະກິດເປັນຫົວໜ່ວຍວັດ ແທກເອກະພາບອັນດຽວ. ການເຄື່ອນໄຫວເສດຖະກິດ ແບບຖຸມດ່ຽງ ແລະມີ ຜົນກຳໄລ ເຮັດໃຫ້ສະພາບທາງດ້ານເສດຖະກິດ-ການເງິນ ຂອງວິສາຫະກິດ ໄປຂົນໂດຍກົງ ກັບໜາກຜົນການເຄື່ອນໄຫວເສດຖະກິດຂອງວິສາຫະກິດ.

ໂດຍປະຕິບັດການຊຸ້ນຳແບບມີແຜນການ ລັດສັງຄົມນິຍົມ ແມ່ນນຳໃຊ້ການ ເຄື່ອນໄຫວເສດຖະກິດແບບຖຸມດ່ຽງ ແລະ ມີຜົນກຳໄລ ໃນຖານະເປັນເຄື່ອງ ມື ເພື່ອມີການກະທົບທາງດ້ານເສດຖະກິດເຂົ້າໃສ່ວຽກງານຂອງວິສາຫະກິດ, ເປັນພາຫະນະເພື່ອກວດກາໜາກຜົນການເຄື່ອນໄຫວເສດຖະກິດ ຂອງແຕ່ລະ ວິສາຫະກິດ, ເປັນເຄື່ອງມື ເພື່ອຕໍ່ສູ້ໃຫ້ມີການປະຕິບັດແຜນການແຫ່ງລັດ.

ການເຄື່ອນໄຫວເສດຖະກິດແບບຖຸມດ່ຽງ ແລະ ມີຜົນກຳໄລ ຈຸກຍູ້ ສົ່ງ ເສີມໃຫ້ເພີ່ມທະວີການຜະລິດ ເຄື່ອງຂອງທີ່ສັງຄົມຕ້ອງການ ແລະ ໃຫ້ປັບປຸງ ຄຸນນະພາບມັນໃຫ້ດີກວ່າເກົ່າ. ຜະລິດຕະພັນທີ່ຜູ້ຊຸ້ມໃຊ້ບໍ່ຕ້ອງການກໍ່ຈະ ຂາຍ ບໍ່ອອກ ແລະ ວິສາຫະກິດ ກໍ່ຈະບໍ່ໄດ້ຮັບການຫົດແທນຄືນ ຄ່າທຶນຮອນທີ່ຕົນໄດ້ ໃຊ້ຈ່າຍໄປແລ້ວນັ້ນ. ດ້ວຍເຫດນີ້ ການເຄື່ອນໄຫວເສດຖະກິດແບບ ຖຸມດ່ຽງ

ແລະ ມີຜົນກຳໄລ ຈຶ່ງຮັບໃຊ້ການຕອບສະໜອງຄວາມຮຽກຮ້ອງຕ້ອງການ - ຂອງສັງຄົມໄດ້ຢ່າງເຕັມສ່ວນກວ່າໝູ່ ທັງມີກຳມາຈາກກົດເກນພົ້ນຖານ ທາງ ດ້ານເສດຖະກິດ ຂອງສັງຄົມນິຍົມນັ້ນເອງ .

ການເຄື່ອນໄຫວເສດຖະກິດ ແບບຄຸມດ່ຽງ ແລະ ມີຜົນກຳໄລ ພົວ ພັນ ໂດຍກົງກັບ ການພົວພັນສິນຄ້າ - ເງິນ ແລະ ກັບການເຄື່ອນໄຫວ ຂອງກົດ ເກນຄຸມຄ່າຢູ່ໃນເງື່ອນໄຂ ຂອງເສດຖະກິດ ສັງຄົມນິຍົມ ແບບມີແຜນການ . ໃນນີ້ ມີການໝູນໃຊ້ກົດເກນຄຸມຄ່າ ບໍ່ວ່າເພື່ອຂົນຂັນຊຸ ແລະ ສົມທຽບ ລະ ຫວ່າງການສົ່ມເປືອງ ກັບ ຜົນທີ່ໄດ້ຮັບ ກໍ່ຄືເພື່ອເປັນການອຸກຍູ້ສົ່ງເສີມການ-ຜະລິດ ທາງດ້ານເສດຖະກິດ. ການຈຳໜ່າຍຜະລິດຕະພັນ ຊຸໃຫ້ເຫັນ ວ່າ ການໃຊ້ຈ່າຍສະເພາະແບບສ່ວນຕົວ ຂອງວິສາຫະກິດດັ່ງກ່າວນີ້ ສອດຄ່ອງກັບ ສິ່ງທີ່ຈຳເປັນ ສຳລັບສັງຄົມເຖິງພຽງໃດ. ການຍ້ອງຍໍສັນລະເສີນໝວຍງານ ດ້ວຍວັດຖຸ ກໍ່ໝາຍຄວາມກັບສິ່ງທີ່ໄດ້ກ່າວມານີ້.

ການເຄື່ອນໄຫວເສດຖະກິດ ແບບຄຸມດ່ຽງ ແລະ ມີຜົນກຳໄລ ໝາຍເຖິງ ໃສ່ທົ່ງໝົດລະບົບກົດເກນ ເສດຖະກິດ ຂອງສັງຄົມນິຍົມ, ມັນຮັດໃຫ້ ກົດ ເກນດັ່ງກ່າວນີ້ ມີການປະຕິບັດ ໃຫ້ປະກົດເປັນຈິງ ແລະ ກໍ່ອຸກຍູ້ສົ່ງເສີມ ໃຫ້ ມີການຍົກສູງ ປະສິດທິພາບການຜະລິດ ຂອງສັງຄົມ ແລະ ຄຸນນະພາບ ຂອງ ວຽກງານຂົນຕົ່ມ. ເມື່ອເວົ້າເຖິງຄວາມໝາຍຂອງການເຄື່ອນໄຫວ ເສດຖະ ກິດແບບ ຄຸມດ່ຽງ ແລະ ມີຜົນກຳໄລ ວ.ອິ. ເລນິນ ໄດ້ເຄີຍເນັ້ນຢ້ຳວ່າ ເປັນລ້ານໆຄົນ ອາດຈະພາກັນໄປເຖິງ ລະບອບກອມມູນິດໄດ້ "ບໍ່ແມ່ນ ບົນ ພື້ນຖານນ້ຳໃຈຝຶກຝົນ ໂດຍກົງໂລດ ແຕ່ສວຍໃຊ້ນ້ຳໃຈຝຶກຝົນ ທີ່ກຳເນີດຂົ້ນ ມາຈາກການປະຕິວັດອັນຍິ່ງໃຫຍ່, ບົນພື້ນຖານສິດຜົນປະໂຫຍດສ່ວນຕົວຂອງ ບຸກຄົນ, ບົນພື້ນຖານ ຄວາມສົນໃຈ ຂອງບຸກຄົນ, ບົນພື້ນຖານ ການ ເຄື່ອນໄຫວ ເສດຖະກິດ ແບບຄຸມດ່ຽງ ແລະ ມີຜົນກຳໄລ ". ๑)

ມີການປະຕິບັດການເຄື່ອນໄຫວເສດຖະກິດແບບຄຸມດ່ຽງ ແລະ ມີຜົນກຳ

---

๑) ວ.ອິ.ເລນິນ. ນິພົນຄົບຊຸດ, ເຫລັ້ມ ๔๔, ໜ້າ ๑๕๑.

ໄລ ບໍ່ວ່າຢູ່ໃນລັດວິສາຫະກິດ ກໍ່ຢູ່ ໃນວິສາຫະກິດ ແບບນາລອມ - ສະ ຫະກອນ.

ການຈັດຕັ້ງວຽກງານຢູ່ໃນວິສາຫະກິດຈຸດສາຫະກຳ ບົ່ມພົ້ນຖານການ - ເຄື່ອນໄຫວເສດຖະກິດແບບຄຸມດ່ຽງ ແລະ ທີ່ພົ້ນກຳໄລ ຄາດໝາຍໃຫ້ມີການ ປະຕິບັດ ບັນດາຫລັກການອັນຈຳເປັນ ທີ່ຮັບປະກັນໃຫ້ມີການເຄື່ອນໄຫວເສດ-ຖະກິດ ແບບປະຢັດກ່ວາໝູ່. ໜຶ່ງໃນບັນດາເງື່ອນໄຂຄືແນວນີ້ ແມ່ນການປະ ສານສົມທົບຢ່າງຖືກຕ້ອງ ລະຫວ່າງການນຳພາລັດສັງຄົມນິຍົມຢ່າງລອມ ສູນ ແລະ ຢ່າງມີແຜນການ ກັບຄວາມເປັນເຈົ້າຕົນເອງ ທາງດ້ານເສດຖະກິດ - ແລະ ດ້ານຕັດສິນວຽກງານຕົວຈິງ ແລະ ຫົວຄິດລິເລີ່ມ ຂອງວິສາຫະກິດແລະ ສະຫະບໍລິສັດ. ການປະສານສົມທົບຄືແນວນີ້ ດ້ານໜຶ່ງເປີດໂອກາດໃຫ້ນຳໃຊ້ ທ່າດີເລີດ ຂອງການວາງແຜນການແບບລອມສູນ ແຕ່ອີກດ້ານໜຶ່ງ ກໍ່ປະກອບ ສ່ວນ ຂະຫຍາຍຄວາມຕັ້ງໜ້າຫ້າວໜັ້ນປະດິດສ້າງ ຂອງຊາວຜູ້ອອກແຮງງານ ອອກຢ່າງກ້ວາງຂວາງ. ຫລັກການດັ່ງກ່າວນີ້ ໄດ້ມີການບົ່ງໄວ້ຢູ່ໃນລັດຖະທຳ ມະນູນຂອງ ສ.ສ.ສ.ຊ.

ລັດມອບໃຫ້ລັດວິສາຫະກິດ ແຕ່ລະບ່ອນ ທີ່ເຄື່ອນໄຫວເສດຖະກິດແບບຄຸມ ດ່ຽງ ແລະ ມີພົ້ນກຳໄລ ຮັບຜິດຊອບຊຸບພະຍາກອນເປັນວັດຖຸ ແລະເປັນເງິນ ທີ່ມີຄວາມຈຳເປັນ ເພື່ອຮັບປະກັນ ການປະຕິບັດແຜນການ. ລັດວິສາຫະກິດທີ່ ເຄື່ອນໄຫວເສດຖະກິດແບບຄຸມດ່ຽງ ແລະ ມີພົ້ນກຳໄລ ລົ້ມຕົ້ນມີການພົວພັນ ນຳກັນ ໃນຖານະເປັນຫົວໜວຍເສດຖະກິດ ທີ່ເປັນເຈົ້າຕົນເອງ ແລະ ເປັນ ນິຕິບຸກຄົນ. ວິສາຫະກິດຍັງ ໄດ້ຮັບສິດປະກອບພະນັກງານຢ່າງຄົບຖ້ວນ ເຂົ້າ ໃສ່ວຽກງານ, ກໍ່ສ້າງພະນັກງານແລະຍົກລະດັບ ຄວາມຊຳນິຊຳນານ ຂອງ ຊາວຜູ້ອອກແຮງງານນັ້ນ ແລະ ປະຕິບັດລະບອບເບີກຈ່າຍຄ່າແຮງງານ ແບບ ນັ້ນ ຫລ ແບບນ.

ວິສາຫະກິດທີ່ເຄື່ອນໄຫວເສດຖະກິດ ແບບຄຸມດ່ຽງ ແລະ ມີພົ້ນກຳໄລ - ລ້ວນແຕ່ມີການຄຸມດ່ຽງບັນຊີສະເພາະຕ່າງຫາກ ທີ່ສອງແສງເຖິງຕົວເລກ ກຳ ນົດໝາຍການເຄື່ອນໄຫວເສດຖະກິດອັນຕົ້ນຕໍ ຂອງວິສາຫະກິດ. ວິສາຫະກິດ ມີບັນຊີ ເພື່ອໄລລຽງຢູ່ທະນາຄານແຫ່ງລັດ ຊຶ່ງເປັນຜູ້ທີ່ຮັດໜ້າທີ່ປົກປັກ ຮັກ ສາທຶນຮອນເປັນເງິນ ແລະ ໄລລຽງກັບ ວິສາຫະກິດ ແລະ ອົງການຈັດ ຕັ້ງ

ອ໌ນໆ.

ທ້ງຫມົດນ້ີ ບອກເຂ້ົາກັນ ມັນເຮັດໃຫ້ຜູ້ນໍາ ຂອງວິສາຫະກິດ ແລະອົງການ ຈັດຕ້ັງເສດຖະກິດທ້ງຫລາຍ ມີຄວາມອາດສ໋າມາດຕັດສິນບັນຫາ ທ່ີເກີດ ຂ້ົນ-ຜ່ານການຊຸ້ມໍາການຜະລິດໄດ້ຢ່າງວ່ອງໄວ ແລະ ທັນການ, ມີຫ໋ວຄິດລິ ເລ່ີມ ອັນວ່ອງໄວ ແລະ ມີຄວາມນ້ີມນວມອ່ອນໂຍນ ໃນການຊຸ້ມໃຊ້ພາຫະນະ ການ ຜະລິດ ແລະ ທ໋ນຮອນ ແລະ ສູ້ຊຸ້ມປະຕິບັດແຜນການ ໂດຍມີການໃຊ້ຈ່າຍໃນ ລະດັບຕ່ໍາສຸດ.

ລັດວິສາຫະກິດ ມີຄວາມເປັນເຈ້ົາຕົນເອງ ທາງດ້ານເສດຖະກິດໃນການ ຕັດສິນວຽກງານ ຢ່ໃນຂອບເຂດຂອງພາລະໜ້າທ່ີ່ມອບໝາຍໃນແຜນການ - ແຫ່ງລັດ. ໃນເວລາມອບໝາຍໃຫ້ວິສາຫະກິດ ເປັນເຈ້ົາຕົນເອງ ທາງດ້ານ ເສດຖະກິດໃນການຕັດສິນວຽກງານ ລັດກໍ່ທ້ງມອບໝາຍໃຫ້ພວກເຂ້ົາເຈ້ົາ ມີ ຄວາມຮັບຜິດຊອບທາງດ້ານວັດຖ ໃນການປົກປັກຮັກສາຊັບສົມບັດ ບ່ໍໃຫ້ຕົກ - ເຮ່ຍເສ່ຍຫາຍ, ໃນການນໍາໃຊ້ຊັບສົມບັດດ່ັງກ່າວຢ່າງຖ໋ກຕ້ອງ ແລະເໝາະ ສົມກ່ວ່າໜ່ ໃນການປະຕິບັດແຜນການແລະ ພັນທະຂອງວິສາຫະກິດ ທ່ີ ຕ໋ ງ໋ບປະມານແຫ່ງລັດ, ຕ໋ຜູ້ສະໜອງ ແລະ ຜູ້ຊຸ້ມໃຊ້.

ການປະຕິບັດແຜນການຕາມຕ໋ວເລກ ກໍານົດໝາຍຕ້ົນຕ໋ ທ່ີ່ການ ຢ້ັງ ຢ່ືນ ມາແຕ່ທ່ວງທ້ັ່ງນ້ັ ມີລັກສະນະ ເປັນກົດໝາຍສໍາລັບວິສາຫະກິດແຕ່ລະບ່ອນ ບັນດາຜູ້ນໍາຂອງວິສາຫະກິດ ມີຄວາມຮັບຜິດຊອບ ຕ໋ ອ໋ງການຈັດຕ້ັງຂ້ົນທ່ວງກ່ຽວ ກັບການເຄ່ືອນໄຫວເສດຖະກິດ-ການຜະລິດທ້ງຫມົດຂອງຕົນ.

ແມ່ນ ຂ໋ ຜູກພັນເສດຖະກິດ ທ່ີ່ຄວບຄຸມການພ໋ວພັນ ທາງດ້ານເສດຖະກິດລະ ຫ່ວ່າງວິສາຫະກິດນໍາກັນ. ການພ໋ວພັນແບບມີ ຂ໋ ຜູກພັນນໍາກັນແມ່ນໜ້ົ່ງໃນລັກສະ ນະສະເພາະຂອງການເຄ່ືອນໄຫວເສດຖະກິດແບບຄຸມດ່ຽງແລະ ມີພົນກໍາໄລ. ໂດຍສອດຄ່ອງກັບແຜນການແຫ່ງລັດບັນດາວິສາຫະກິດ ທ່ີ່ ເຄ່ືອນໄຫວເສດຖະກິດ ແບບຄຸມດ່ຽງແລະມີພົນກໍາໄລ ຊຸ້ພາຫະນະການຜະລິດ ທ່ີ່ ຕົນເອງ ຕ້ອງການ ແລະ ຈໍາໜ່າຍຜະລິດຕະພັນຂອງຕົນໃຫ້ແກ່ພວກຊຸ້ມໃຊ້ ທ່ີ ໄ ດ ຊຸ້ມ ຂ໋ ຜູກພັນຮ່ວມ ຕົນ.

ຢ່ໃນ ຂ໋ ຜູກພັນ ໄ ດ ມີການກໍານົດ ເ ງ ່ ອ ນ ໄ ຂ ໃນການຈັດສ່ົ ງ, ບ ລິ ມ າ ດ, ລາຍການ ແລະ ຄຸນນະພາບຂອງຜະລິດຕະພັນ, ກໍານົດຈັດສ່ົ ງ,ລາຄາ, ກໍາ ນົດແລະລະບຽບການຈ່າຍ ເ ງ ນ, ຮູບການ ແລະ ລະດັບຄວາມຮັບຜິດຊອບໃນ

ກໍລະນີມີການບໍ່ປະຕິບັດເງື່ອນໄຂ ຂອງຂໍ້ຜູກພັນ.

ການປະຕິບັດລະບຽບວິໄນຂອງຂໍ້ຜູກພັນ ໂດຍວິສາຫະກິດ ແມ່ນຫນຶ່ງ ໃນເງື່ອນໄຂອັນສຳຄັນຍິ່ງ ເພື່ອເຄື່ອນໄຫວເສດຖະກິດແບບດຸນດ່ຽງ ແລະ ມີຜົນກຳໄລ.

ການເຄື່ອນໄຫວ ເສດຖະກິດແບບດຸນດ່ຽງ ແລະ ມີຜົນກຳໄລ ວາງຄາດ ຫມາຍ ໃຫ້ມີການກວດກາ ການເຄື່ອນໄຫວຜະລິດຂອງວິສາຫະກິດຢ່າງເປັນ-ປະຈຳທາງດ້ານການເງິນ. ສິ່ງທີ່ກ່າວມານີ້ ຫມາຍຄວາມວ່າວິສາຫະກິດ ໄດ້ຮັບທຶນຮອນ ໂດຍຂຶ້ນກັບຫມາກຜົນວຽກງານຂອງຕົນ. ການປະຕິບັດແຜນການ ການຜະລິດ ແລະ ແຜນການ ການສະສົມບໍ່ໄດ້, ການໃຊ້ ຈ່າຍລົ້ນຄາດ - ຫມາຍທີ່ໄດ້ວາງໄວ້ ຕາມແຜນການລ້ວນແຕ່ສ້າງໃຫ້ວິສາຫະກິດເກີດມີ ຄວາມ ຫຍຸ້ງຍາກທາງດ້ານການເງິນ, ໃນການໄລ່ລຽງ ກັບ ຜູ້ສະຫນອງ, ໃນການ ປະຕິບັດພັນທະຕໍ່ບັນດາອົງການ ການເງິນ ແລະ ອົງການສິນເຊື່ອ, ອັນນັ້ນ ເປັນສາຍເຫດໃຫ້ມີການປະຕິບັດວິໄນທາງດ້ານເສດຖະກິດ. ແມ່ນບັນດາ ອົງ ການສິນເຊື່ອ-ການເງິນທີ່ເປັນຜູ້ປະຕິບັດການກວດກາທາງດ້ານການເງິນ.ອົງ ການດັ່ງກ່າວ ປະຕິບັດການກວດກາອັນນີ້ ຜ່ານການລົງທຶນ ແລະ ການໃຫ້ສິນ ເຊື່ອ ແກ່ວິສາຫະກິດ ກໍ່ຄືຜ່ານລະບອບໄລ່ລຽງຄ່າຜະລິດຕະພັນທີ່ຈັດສົ່ງໃຫ້ກັນ. ການກວດກາທາງດ້ານການເງິນ ບັງຄັບໃຫ້ວິສາຫະກິດ ດຳເນີນລະບອບການ ປະຢັດຢ່າງເຂັ້ມງວດກວ່າເກົ່າ, ໃຊ້ຈ່າຍທຶນຮອນ ແບບມັດທະຍັດກວ່າເກົ່າ ແລະ ເຮັດໃຫ້ທຶນຮອນຫມູນວຽນໄວກວ່າເກົ່າ.

ການເຄື່ອນໄຫວເສດຖະກິດແບບດຸນດ່ຽງ ແລະມີຜົນກຳໄລ ວາງຄາດ - ຫມາຍໃຫ້ວິສາຫະກິດທັງຫມົດຫນ່ວຍງານ ແລະ ຄະນະນຳ <u>ມີຄວາມສົນໃຈ - ທາງດ້ານວັດຖຸ</u> ໃນການປະຕິບັດແຜນການໃຫ້ໄດ້ ແລະ ໃນການເຄື່ອນ ໄຫວ ເສດຖະກິດແບບປະຕິບັດ ແລະ ແບບຖືກຕ້ອງເຫມາະສົມ.

ຄວາມສົນໃຈທາງດ້ານວັດຖຸ ຂອງຊາວຜູ້ອອກແຮງງານ ໄດ້ຮັບການ ຮັບ ປະກັນ ໂດຍຜ່ານລະບອບເງິນເດືອນ ແລະ ເງິນຄ່າບຳເນັດ ໂດຍສອດຄ່ອງ ກັບກົດເກນເສດຖະກິດ ກ່ຽວກັບການແຈກຢາຍຕາມແຮງງານ. ການສ້າງໃຫ້ ມີ ຄັງພິເສດ ໄດ້ເຮັດໃຫ້ຊາວຜູ້ອອກແຮງງານ ຢູ່ວິສາຫະກິດ ເພີ່ມຄວາມ ສົນໃຈ ທາງດ້ານວັດຖຸແບບລວມຫມູ່ ແລະ ແບບສ່ວນຕົວຂຶ້ນຕື່ມ. ໂດຍໃຊ້ກ້ອນ

ເງິນທີ່ຫັກອອກຈາກກຳໄລ ຈົ່ງມີການສ້າງຄັງ ຢູ່ວິສາຫະກິດ ສັງຄົມນິຍົມ-ຂັ້ນສາມຄັງຄື:

ຈ. ຄັງ ເພື່ອຊຸກຍູ້ສົ່ງເສີມຊາວຜູ້ອອກແຮງງານທາງດ້ານວັດຖຸ. ກ້ອນເງິນ ໃນຄັງ ອັນນີ້ຖືກນຳໃຊ້ເພື່ອຊຸກຍູ້ສົ່ງເສີມຊາວຜູ້ອອກແຮງງານ ໃນກໍລະນີທີ່ຜູ້ກ່ຽວໄດ້ມີຜົນງານສະເພາະ ແລະ ໃນກໍລະນີວິສາຫະກິດ ໄດ້ມີຜົນ - ງານລະດັບສູງ ຜ່ານການສະຫລຸບວຽກງານລວມ. ໂດຍໃຊ້ກ້ອນເງິນດັ່ງກ່າວ ຈົ່ງມີການຈ່າຍໃຫ້ກຳມະກອນ ແລະ ພາລະກອນ ບໍ່ສະເພາະແຕ່ເງິນບຳເນັດ ຄ່າຕົວເລກ ກຳນົດຫມາຍ ທີ່ມີລະດັບສູງ ໃນການເຮັດວຽກ ໄລຍະຫມົດ ປີ ເທົ່ານັ້ນ ແຕ່ກໍ່ຍັງມີການຈ່າຍເງິນຍ້ອງຍໍເປັນເທື່ອດຽວ ໃນທ້າຍປີອີກ. ໃນນີ້ມີການຄຳນຶງເຖິງ ການເຮັດວຽກງານຢ່າງບໍ່ຂາດໄລຍະຢູ່ວິສາຫະກິດ.

ຄ. ຄັງ ເພື່ອຮັບໃຊ້ວຽກງານທາງດ້ານສັງຄົມ-ວັດທະນະທຳ ແລະ ເພື່ອກໍ່ສ້າງເຮືອນຊານ. ກ້ອນເງິນໃນ ຄັງດັ່ງກ່າວ ແມ່ນໃຊ້ເຂົ້າໃນການກໍ່ສ້າງເຮືອນຊານ (ເພີ່ມໃສ່ວັດຖຸ ແລະ ທຶນຮອນຂອງສູນກາງ ທີ່ແບ່ງ ເຂົ້າ ຮັບໃຊ້ວຽກງານດັ່ງກ່າວ, ໃນການກໍ່ສ້າງ ແລະ ບົວລະບັດເຮືອນລ້ຽງເດັກ, ໂຮງຫມໍເດັກນ້ອຍ, ຄ້າຍພັກຂອງເຍົາວະຊົນ, ເຮືອນພັກ ແລະ ສະຖານ ທີ່ພັກຜ່ອນ ໃນນັ້ນມີການປິ່ນປົວ ແລະ ວຽກງານອື່ນໆທາງດ້ານສັງຄົມ-ວັດທະ-ນະທຳ.

ມ. ຄັງ ເພື່ອເສີມຂະຫຍາຍການຜະລິດ. ຢູ່ໃນຄັງ ດັ່ງກ່າວນອກ ຈາກກ້ອນເງິນທີ່ຫັກອອກມາຈາກຳໄລແລ້ວ ກໍ່ຍັງມີພາກສ່ວນຫນຶ່ງ ຂອງ ເງິນ ຄ່າຫລຸ້ຍຫ້ຽນ. ວິສາຫະກິດເປັນເຈົ້າໃນການໃຊ້ກ້ອນເງິນ ຢູ່ໃນຄັງ ດັ່ງ ກ່າວນີ້ ເພື່ອປັບປຸງການຜະລິດ ໃຫ້ກ້າວຫນ້າກວ່າເກົ່າ ທາງດ້ານ ເຕັກນິກ ແລະ ເພື່ອ ຟື້ນຟູຄັງ ພື້ນຖານຄືນໃຫ້ຄົບຖ້ວນ.

ຫມາຍຄວາມວ່າ, ເມື່ອມີການເຄື່ອນໄຫວເສດຖະກິດແບບດຸນດ່ຽງ ແລະ ມີຜົນກຳໄລ ທັງຫມົດວິສາຫະກິດ ແລະ ຊາວຜູ້ອອກແຮງງານແຕ່ລະຄົນ ຢູ່ໃນ ນັ້ນ ລ້ວນແຕ່ມີຄວາມສົນໃຈທາງດ້ານວັດຖຸ ໃນການປະຕິບັດແຜນການ ໃຫ້ໄດ້ ຕາມລະດັບຄາດຫມາຍ ແລະ ລື່ນລະດັບຄາດຫມາຍ, ໃນການເຄື່ອນໄຫວ - ເສດຖະກິດແບບປະຢັດ ແລະ ມີຜົນກຳໄລກວ່າເກົ່າ.

ການເຄື່ອນໄຫວເສດຖະກິດ
ແບບຄຸມດ່ຽງ ແລະ ມີ
ຜົນກຳໄລ ກັບລະບອບ
ການປະຢັດ

ການຊຸ້ນຳເສດຖະກິດສັງຄົມນິຍົມແບບມີແຜນ
ການ ສ້າງໃຫ້ເກີດມີທຸກຄວາມອາດສາມາດ
ເພື່ອຈະນຳໃຊ້ຊັບພະຍາກອນທາງດ້ານວັດຖຸ
ການເງິນ ແລະ ແຮງງານຢ່າງຖືກຕ້ອງ -
ເໝາະສົມໄດ້ ຢູ່ໃນຂອບເຂດຂອງທັງໝົດ
ສັງຄົມ. ຊາວຜູ້ອອກແຮງງານແຕ່ລະຄົນ ທີ່ເຮັດວຽກບໍ່ແມ່ນເພື່ອຮັບໃຊ້ ພວກ
ນາຍທຶນ ແລະ ພວກເຈົ້າທີ່ດິນ ແຕ່ຫາກເຮັດວຽກຮັບໃຊ້ຕົນເອງ ແລະຮັບໃຊ້
ສັງຄົມຂອງຕົນ ພວກເຂົາລ້ວນແຕ່ມີຄວາມສົນໃຈຢ່າງຫລວງຫລາຍ ຕໍ່ການນຳ
ໃຊ້ ຊັບສົມບັດ ຂອງສັງຄົມຢ່າງມັດທະຍັດ ແລະ ຕໍ່ການດຳເນີນເສດຖະກິດ-
ຢ່າງປະຢັດ.

ລະບອບການປະຢັດແມ່ນຫລັກການເຄື່ອນໄຫວເສດຖະກິດແບບສັງຄົມນິຍົມ.
ເນື້ອໃນຂອງຫລັກການດັ່ງກ່າວນີ້ ແມ່ນຢູ່ບ່ອນວ່າ ເຮັດແນວໃດ ໃຫ້ມີການຜະ
ລິດ ຜະລິດຕະພັນແນວດີອອກມາໃຫ້ໄດ້ຫລາຍກວ່າເກົ່າ ໂດຍມີການສົ້ນເປືອງ
ພາຫະນະ ແລະແຮງງານໜ້ອຍກວ່າເກົ່າ. ການປະຕິບັດລະບອບການປະຢັດ
ແມ່ນໜຶ່ງໃນບັນດາເງື່ອນໄຂອັນສຳຄັນ ທີ່ຮັບປະກັນ ໃຫ້ເສດຖະກິດສັງຄົມ ນິ
ຍົມເຕີບໃຫຍ່ຂະຫຍາຍຕົວ. ການໃຊ້ຈ່າຍຊັບພະກອນທາງດ້ານແຮງງານ, ວັດ
ຖຸ ແລະ ການເງິນແບບມັດທະຍັດ ແລະ ປະຢັດ ໄດ້ເຄີຍມີແລະພວມມີຄວາມ
ໝາຍອັນໃຫຍ່ຫລວງ ເພື່ອເສີມຂະຫຍາຍເສດຖະກິດສັງຄົມນິຍົມ.

ການປະຕິບັດໂຄງການເສີມຂະຫຍາຍກຳລັງການຜະລິດ ໂດຍປະຊາ ຊົນ
ໂຊວຽດ ບົນພື້ນຖານຄວາມກ້າວໜ້າທາງດ້ານສັງຄົມ ຊຶ່ງແມ່ນກອງປະຊຸມ -
ໃຫຍ່ຄັ້ງທີ ๒๗ ຂອງ ພ.ກ.ສ.ຊ. ເປັນຜູ້ວາງອອກນັ້ນ ມັນຮຽກຮ້ອງໃຫ້ ມີ
ການໃຊ້ຈ່າຍຊັບພະຍາກອນ ທາງດ້ານແຮງງານ, ວັດຖຸ ແລະ ການເງິນ -
ຢ່າງຫລວງຫລາຍ. ຈາກນີ້ ຈຶ່ງເປັນທີ່ເຂົ້າໃຈນຳກັນດີ ວ່າເປັນຫຍັງລະບອບ
ການປະຢັດ ຈຶ່ງມີຄວາມໝາຍອັນສັ້ນ ນັບທະວີຄູນຂຶ້ນ ໃນໄລຍະສັງຄົມນິຍົມ
ຂະຫຍາຍຕົວ. ໃນການເຄື່ອນໄຫວເສດຖະກິດຈະຕ້ອງປະຢັດ.

ການປະຕິບັດລະບອບການປະຢັດ ປະກອບສ່ວນໃຫ້ສາມາດປະຕິບັດ ແຜນ
ການໄດ້ຕາມລະດັບຄາດໝາຍ ແລະ ລົ້ນລະດັບຄາດໝາຍ, ຫລຸດຜ່ອນການ
ສົ້ນເປືອງແຮງງານ ແລະ ຫລຸດຜ່ອນຕົ້ນທຶນການຜະລິດລົງ. ການນຳໃຊ້ ກຳ

ລັງແຮງການຜະລິດທີ່ມີຢູ່ແລ້ວນັ້ນ ໃຫ້ດີກວ່າເກົ່າ, ການໃຊ້ຈ່າຍວັດຖຸດິບ ພັດ ສະດຸ, ເຊື້ອເພີງ, ພະລັງງານໄຟຟ້າ ແລະ ອື່ນໆຢ່າງປະຢັດ, ລ້ວນແຕ່ - ເປັນເງື່ອນໄຂ ໃຫ້ສາມາດເພີ່ມທະວີການຜະລິດເຄື່ອງຂອງອອກມາ ຢ່າງ ບໍ່ ຕ້ອງມີການລົງທຶນພື້ນຖານເພີ່ມເຕີມ. ເສດຖະກິດແຫ່ງຊາດຍິ່ງມີການດຳເນີນ ແບບຖືກຕ້ອງເຫມາະສົມກວ່າເກົ່າເທົ່າໃດ, ຊັບພະຍາກອນທາງດ້ານ ແຮງ ງານ, ວັດຖຸ ແລະ ການເງິນຍິ່ງມີການນຳໃຊ້ຢ່າງປະຢັດເທົ່າໃດ ຄວາມຮັ່ງ ມີຂອງປະຊາຊົນກໍ່ຍິ່ງຈະເພີ່ມທະວີຂຶ້ນຢ່າງໄວວາເທົ່ານັ້ນ.

ການປະຢັດແມ່ນແຕ່ໃນ "ເລື່ອງເບັດຕະເລັດ " ກໍ່ອາດຈະພາໃຫ້ເກີດມີ ຫມາກຜົນອັນໃຫຍ່ຫລວງໄດ້ ໃນຂອບເຂດຂອງທົ່ວປະເທດ. ບໍ່ຄວນຖືເບົາຕະ ຫລອດຮອດຄວາມອາດສາມາດອັນນ້ອຍໆອັນໃດອັນຫນຶ່ງໃນການຫລຸດຜ່ອນລາຍ ຈ່າຍ, ໃນການປະຢັດແຮງງານ ແລະ ຊັບພະຍາກອນທາງດ້ານວັດຖຸ ແລະ ການເງິນ. "ປະຢັດເງິນໂກເປັກຫນຶ່ງ ກໍພາໃຫ້ມີການປະຢັດເງິນໄດ້ເປັນຮຸບ ຫນຶ່ງ". ການຕໍ່ສູ້ເພື່ອໃຫ້ມີການປະຢັດ ຫມາຍຄວາມວ່າ ໃຫ້ມີການຄົ້ນພົບ - ຄວາມອາດສາມາດອັນໃຫມ່ອຽມຢູ່ເລື້ອຍໆ ເພື່ອໃຫ້ມີການເພີ່ມທະວີການ ຜະ ລິດ ແລະ ມີການຫລຸດຜ່ອນຕົ້ນທຶນການຜະລິດ, ມີການໃຊ້ຈ່າຍວັດຖຸດິບ, ພັດ ສະດຸ, ເຊື້ອເພີງ, ພະລັງງານໄຟຟ້າຢ່າງມັດທະຍັດ ແລະ ຖືກຕ້ອງເຫມາະ ສົມກວ່າເກົ່າ, ມີການຫລຸດຜ່ອນກໍລະນີຜະລິດບໍ່ໄດ້ຕາມຄຸນນະພາບ ແລະຫລຸດ ຜ່ອນທຸກກໍລະນີ ທີ່ມີການຕົກເຮ່ຍເສຍຫາຍ ແລະ ມີການໃຊ້ຈ່າຍທີ່ບໍ່ແມ່ນເພື່ອ ຮັບໃຊ້ການຜະລິດ.

ຮູບການຕ່າງໆໃນການເຄື່ອນໄຫວ ເສດຖະກິດແບບດຸນດ່ຽງແລະມີຜົນ ກຳໄລ

ຢູ່ໃນຂ້າງເທິງນັ້ນພວກເຮົາໄດ້ ເລົ່າ ເຖິງການເຄື່ອນໄຫວເສດຖະກິດແບບ ດຸນດ່ຽງແລະມີຜົນກຳໄລຂອງວິສາຫະ ກິດການຜະລິດ ໃນຖານະເປັນ ຕ່ອງ ໂສ້ຂັ້ນທຳອິດ ໃນເສດຖະກິດແຫ່ງຊາດ. ແຕ່ການເຄື່ອນໄຫວເສດຖະກິດແບບ ດຸນດ່ຽງ ແລະ ມີຜົນກຳໄລຢູ່ໃນຂອບເຂດ ພາຍໃນຂອງວິສາຫະກິດແລະການ ເຄື່ອນໄຫວແບບດຸນດ່ຽງ ແລະ ມີຜົນກຳໄລ ຢູ່ໃນຕ່ອງໂສ້ເສດຖະກິດທີ່ ຢູ່ຂັ້ນ ສູງກວ່າວິສາຫະກິດ ລ້ວນແຕ່ມີຄວາມຫມາຍສຳຄັນໃນການຄຸ້ມຄອງເສດຖະກິດ

ແຫ່ງຊາດ.

ການເຄື່ອນໄຫວເສດຖະກິດແບບຄຸມດ່ຽວ ແລະ ມີຜົນກຳໄລ ຢູ່ໃນ ພາກສ່ວນການຜະລິດຕ່າງໆ ຂອງວິສາຫະກິດ ມີຄວາມແຕກຕ່າງຢ່າງຫລວງຫລາຍ ກັບ ການເຄື່ອນໄຫວເສດຖະກິດ ແບບຄຸມດ່ຽວ ແລະ ມີຜົນກຳໄລ ຢູ່ໃນວິສາຫະກິດ. ພາກສ່ວນຕ່າງໆຢູ່ໃນວິສາຫະກິດ (ຂະແໜງການຜະລິດຕ່າງໆ, - ບ່ອນຜະລິດຕ່າງໆ ແລະ ໜ່ວຍຜະລິດ ແລະ ອື່ນໆ) ບໍ່ມີການຜະລິດສິນຄ້າ ອອກມາ ແລະ ຢູ່ພາຍໃນວິສາຫະກິດເອງ ກໍບໍ່ມີການຊື້-ຂາຍ. ເມື່ອ ພາກ ສ່ວນການຜະລິດຕ່າງໆ ຢູ່ພາຍໃນບໍ່ເຮັດໜ້າທີ່ຈຳໜ່າຍຜະລິດຕະພັນ ພວກ ເຂົາເຈົ້າກໍບໍ່ມີລາຍໄດ້ຂອງຕົນເອງ, ພວກເຂົາເຈົ້າບໍ່ມີການເຊັນຂໍ້ຜູກພັນ - ເສດຖະກິດ ກັບ ວິສາຫະກິດບ່ອນອື່ນໆ, ພວກເຂົາເຈົ້າບໍ່ມີການຄຸມດ່ຽວ ສະ ເພາະຕ່າງຫາກ, ພວກເຂົາເຈົ້າບໍ່ເປີດບັນຊີເພື່ອໄລລ່ຽງຢູ່ທະນາຄານ,ພວກ ເຂົາເຈົ້າບໍ່ພົວພັນໂດຍກົງ ກັບ ອົງການຈັດຕັ້ງຢູ່ໃນລະບົບສິນເຊື່ອ ແລະການ ເງິນ, ພວກເຂົາເຈົ້າບໍ່ເປັນນິຕິບຸກຄົນ ແລະ ອື່ນໆ. ໂດຍສ່ວຍໃຊ້ ການ ເຄື່ອນໄຫວເສດຖະກິດແບບຄຸມດ່ຽວ ແລະ ມີຜົນກຳໄລຢູ່ພາຍໃນ ມັນມີຄວາມ ສາມາດ ມອງເຫັນໄດ້ຢ່າງຊັດເຈນກວ່າເກົ່າ ຜົນຈາກການປະກອບສ່ວນເຂົ້າ ໃນອົງການລວມຂອງວິສາຫະກິດຂອງແຕ່ລະພະແນກການຜະລິດ, ແຕ່ລະຂະ ແໜງການຜະລິດ ແລະ ອື່ນໆ. ກຳນົດໜ່ວຍການວາງແຜນການ ແລະການ ຊຸກຍູ້ສົ່ງເສີມ ພາກສ່ວນຕ່າງໆໃນວິສາຫະກິດ ຍັງມີການກົມກຽວ ກັບຕົວເລກ ກຳນົດໜ່ວຍ ຂອງທັງໝົດວິສາຫະກິດເທົ່າໃດ ການເຄື່ອນໄຫວເສດຖະກິດ- ແບບຄຸມດ່ຽວ ແລະ ມີຜົນກຳໄລ ຢູ່ໃນຂອບເຂດພາຍໃນໂຮງງານ ກໍຍັງມີປະ ສິດທິຜົນຫລາຍຂົນເທົ່ານັ້ນ.

ການເຮັດວຽກງານຂອງພະແນກການຜະລິດ ທີ່ດຳເນີນການເຄື່ອນ ໄຫວ ເສດຖະກິດແບບຄຸມດ່ຽວ ແລະ ມີຜົນກຳໄລ ໄດ້ຮັບການຕີລາຄາ ບໍ່ສະເພາະ ພຽງແຕ່ອີງຕາມຕົວເລກກຳນົດໜ່ວຍ ທາງດ້ານຈຳນວນ ກຽວກັບການ ປະຕິ ບັດໜ້າທີ່ມອບໝາຍທາງດ້ານການຜະລິດເທົ່ານັ້ນ ແຕ່ຍັງອີງຕາມຕົວເລກ- ກຳນົດໜ່ວຍທາງດ້ານຄຸນນະພາບອີກ. ມີການສົມທຽບຕົ້ນທຶນການຜະລິດ ຕົວ ຈິງ ກັບ ຕົວເລກກຳນົດໜ່ວຍ ຕາມແຜນການ ແລະ ກໍມີການຕີລາຄາ ວ່າມີ ການປະຢັດເທົ່າໃດ ຫລື ມີການໃຊ້ຈ່າຍ ເກີນເທົ່າໃດ. ການໃຫ້ບຳເນັດ

ແກ່ຫນ່ວຍງານຢູ່ໃນພະແນກການຜະລິດ,ບ່ອນຜະລິດ ແລະ ຫນ່ວຍຜະລິດ ໄດ້ຮັບການປະຕິບັດ ໂດຍການເພີ່ມເຕີມ ທາງດ້ານວັດຖຸ ອີງຕາມຫມາກຜົນການ ເຄື່ອນໄຫວທາງດ້ານເສດຖະກິດ. ໄດ້ມີການເລີ່ມຕົ້ນປະຕິບັດ ຫລັກການ - ເຄື່ອນໄຫວເສດຖະກິດ ແບບດຸນດ່ຽງ ແລະ ມີຜົນກຳໄລ ຢູ່ໃນສະຫະບໍລິສັດ-ອຸດສາຫະກຳ ທີ່ໄດ້ມີການສ້າງຕັ້ງຂຶ້ນມາ (ກົມບີນາ). ສະຫະບໍລິສັດອຸດສາ-ຫະກຳ ຮັບປະກັນໃຫ້ມີການທົດແທນຄືນຢ່າງຄົບຖ້ວນ ການໃຊ້ຈ່າຍເຂົ້າ ໃນ ການຜະລິດ ນັບທັງການໃຊ້ຈ່າຍຄ່າອອກແບບ່ ວາງແຜນການ, ຄ່າປະດິດ - ສ້າງ ແລະ ຄ່າຄົ້ນຄວ້າວິທະຍາສາດ, ຄ່າຜະລິດເຄື່ອງຂອງອັນໃຫມ່ແລະຈັດ ຕັ້ງການຜະລິດເຄື່ອງຂອງແນວໃຫມ່ ແລະ ນຳໃຊ້ການວິວັດອັນໃຫມ່,ຄ່າລ້ຽງ ດູກົງຈັກຄຸ້ມຄອງ ກໍ່ຄືຮັບປະກັນໃຫ້ມີກຳໄລອັນຈຳເປັນ ເພື່ອປະຕິບັດການໂອນ ເຂົ້າງົບປະມານ. ສະຫະບໍລິສັດອຸດສາຫະກຳ ຊົນໃຊ້ຊັບພະຍາກອນທາງດ້ານ ວັດຖຸ, ການເງິນ ແລະ ແຮງງານ. ມັນເປັນອົງການຈັດຕັ້ງ ທີ່ດຳເນີນການ ເຄື່ອນໄຫວເສດຖະກິດ ແບບດຸນດ່ຽງ ແລະ ມີຜົນກຳໄລ ແລະ ກໍ່ມີທັງ ບົດ ບາດ ເປັນອົງການຄຸ້ມຄອງເສດຖະກິດ.

ການນຳໃຊ້ວິທີການເຄື່ອນໄຫວ ເສດຖະກິດແບບດຸນດ່ຽງ ແລະ ມີຜົນກຳ ໄລ ເຂົ້າໃນຕົວຈິງຂອງການເຄື່ອນໄຫວ ຂອງຫມົດທຸກຕ່ອງໂສ້ເສດຖະກິດ - ສ້າງເງື່ອນໄຂໃຫ້ສາມາດເສີມຂະຫຍາຍ ຄວາມກ້າວຫນ້າ ທາງດ້ານເຕັກນິກ ໄດ້ຢ່າງເລັ່ງລັດ, ໃຫ້ສາມາດເຮັດການຜະລິດແບບສຸມ ແລະ ຍົກສູງ ປະສິດ ທິພາບ ຂອງການຜະລິດຂຶ້ນຕື່ມ.

ໄ. ກອງທຶນ ແລະ ພາຫະນະຂອງວິສາຫະກິດ ທີ່ດຳເນີນການເຄື່ອນ ໄຫວເສດຖະກິດ ແບບດຸນດ່ຽງ ແລະ ມີຜົນກຳໄລ

ຄືດັ່ງທີ່ຮູ້ນຳກັນແລ້ວວ່າ ຄຽງຄູ່ກັບແຮງງານນັ້ນ ການຜະລິດຍັງຕ້ອງການ ໃຫ້ມີພາຫະນະຮັບໃຊ້ການຜະລິດ. ພາຫະນະດັ່ງກ່າວ ປະກອບດ້ວຍພາຫະນະ ແຫ່ງການອອກແຮງງານ (ເຄື່ອງຈັກ, ອຸປະກອນ, ຕຶກຮັບໃຊ້ການຜະລິດ , ເຄຫະສະຖານ ແລະ ອື່ນໆ) ແລະເປົ້າຫມາຍການອອກແຮງງານ (ວັດ ຖຸ ດິບ, ເຊື້ອເພີງ, ພັດສະດຸ, ຜະລິດຕະພັນ ເຄົ່ງສຳເລັດຮູບ ແລະ ອື່ນໆ).

ພາຫະນະການຜະລິດ ປະກອບເຂົ້າເປັນທຶນການຜະລິດ. ອີງຕາມລັກສະນະໃນການໝູນວຽນຂອງມັນ ທຶນການຜະລິດ ຂອງວິສາຫະກິດ ສັງຄົມນິຍົມ ແບ່ງອອກເປັນ ທຶນຄົງຖາວ ແລະ ທຶນໝູນວຽນ.

ທຶນຄົງຖາວ ຈັດເຂົ້າຢູ່ໃນ<u>ທຶນຄົງຖາວ</u> ມີພາຫະນະການຜະລິດ ທີ່ຮັບໃຊ້-ການຜະລິດ ໃນໄລຍະຍາວນານ. ຜ່ານການຫລຸຍຫ້ຽນຂອງ ມັນ ພາຫະນະດັ່ງກ່າວ ມີການສົ່ງມູນຄ່າຂອງມັນ ເຂົ້າໃນເຄື່ອງທີ່ຜະລິດອອກ ມາ ແບບເປັນພາກສ່ວນ.

ອີງຕາມການຈຳແນກທີ່ໃຊ້ກັນມາຢູ່ ສ.ສ.ສ.ຊ ຈັດເຂົ້າຢູ່ໃນທຶນການ ຜະລິດຄົງຖາວ ມີຕຶກ ແລະ ເຄຫະສະຖານ ຮັບໃຊ້ການຜະລິດ, ມີເຄື່ອງຈັກ ກຳເນີດໄຟຟ້າ ແລະ ເຄື່ອງຈັກຮັບໃຊ້ການຜະລິດ, ມີເຄື່ອງວັດແທກ, ສາຍ ສົ່ງກະແສໄຟຟ້າ, ເຄື່ອງມື ແລະ ພັດສະດຸ (ທີ່ມີກຳນົດຮັບ ໃຊ້ ເກີນປີໜຶ່ງ ແລະ ມີລາຄາລົ້ມ ๕๐ ຣູບ) ທີ່ສົ່ງໝວດຕ່າງໆ, ກິດຈະການກ່ຽວກັບ ວິວ ທາງ, ໜ້າທາງ, ຄັນຄູ ມີທໍ່ນ້ຳ, ກິດຈະການຊົນລະປະທານ ແລະ ກິດຈະ ການເພື່ອປົວແປງດິນປູກຝັງ, ສັດໃຫຍ່ປະເພດລາກແກ ແລະ ສັດໃຫຍ່ ປະ ເພດຂົນ ແລະ ອື່ນໆ. ທຶນຄົງຖາວແຫ່ງການຜະລິດ ໝວດກ່ຽວກັບ ການຜະ-ລິດຂອງສັງຄົມນິຍົມ.

ການນຳໃຊ້ທຶນຄົງຖາວແບບປະຢັດ ນັ້ນແມ່ນໜຶ່ງໃນຄວາມຮຽກຮ້ອງ ຕ້ອງ ການອັນສຳຄັນທີ່ສຸດສຳລັບບັນດາວິສາຫະກິດ ທີ່ມີການເຄື່ອນໄຫວເສດຖະ ກິດ ແບບໝຸນດ່ຽງ ແລະ ມີຜົນກຳໄລ. ການນຳໃຊ້ທຶນຄົງຖາວໃຫ້ໄດ້ດີກວ່າ ເກົ່າ ສ້າງຄວາມອາດສາມາດ ເພີ່ມທະວີການຜະລິດ ແລະ ຫລຸດຜ່ອນຕົ້ນທຶນ ການ ຜະລິດ ໂດຍບໍ່ຕ້ອງມີການລົງທຶນເພີ່ມເຕີມ.

ສະມັດຖະພາບໃນການລົງທຶນ ແມ່ນມາດຕະວັດອັນຊີ້ບອກການນຳໃຊ້ທຶນຄົງ ຖາວ. ມັນສະແດງອອກໃຫ້ເຫັນຢູ່ໃນຈຳນວນຜະລິດຕະພັນ ທີ່ສາມາດຜະ ລິດ ອອກມາໄດ້ ໃນເມື່ອມີການໃຊ້ຈ່າຍທຶນການຜະລິດເປັນເງິນໜຶ່ງຣູບ ແລະມັນ ກໍອາດຈະສະແດງຕົວອອກມາ ດ້ວຍສູດຄຳນວນ.

$$\text{ສ.ລ.ທ.} = \frac{\text{ຜ}}{\text{ທ}},$$

ຊຶ່ງຢູ່ໃນນີ້ ສ.ລ.ທ. - ສະມັດຖະພາບ ໃນ ການລົງທຶນ, ຜ - ຜະລິດຕະພັນ, ທ -

ຫຶນພື້ນຖານ.

ການນຳໃຊ້ຫຶນການຜະລິດໃຫ້ໄດ້ດີກວ່າເກົ່າ ແມ່ນຫນຶ່ງໃນບັນດາຫນ້າ ທີ່ທາງດ້ານເສດຖະກິດທີ່ສຳຄັນ. ເພື່ອຢາກຍົກສູງສະມັດຖະພາບ ໃນການ ລົງຫຶນ ຕ້ອງນຳເອົາອຸປະກອນທີ່ບໍ່ທັນໄດ້ມີການຕິດຕັ້ງນັ້ນ ເຂົ້າສູ່ການຜະລິດ ໃຫ້ຫມົດ ແລະ ສະເພາະອຸປະກອນອັນບໍ່ຕ້ອງການ ແລະ ເຫລືອເຟືອແລ້ວກໍ່ຕ້ອງ ຂາຍອອກ ຫລືວ່າ ມອບຜ່ານການດຸນດ່ຽງ ໃຫ້ວິສາຫະກິດ ບ່ອນອື່ນທີ່ຕ້ອງ - ການມັນ. ອາດຈະຫລຸດຜ່ອນບັນຫາທີ່ມີອຸປະກອນຖືກປ່ອຍປະໃຫ້ຢຸດສະງັກ ຢູ່ລ້າງ ບໍ່ມີການເຄື່ອນໄຫວ ໂດຍບໍ່ມີເຫດຜົນ ດ້ວຍວິທີການເລັ່ງລັດ ແລະເພີ່ມທະວີຄຸນນະພາບໃນການສ້ອມແປງ, ແກ້ໄຂກໍລະນີບໍ່ສອດຄ່ອງກັນ ລະຫວ່າງ-ການຈັດຕັ້ງ ແລະ ເຕັກນິກ ແລະ ແກ້ໄຂບັນຫາສະຫນອງວັດຖຸ-ເຕັກນິກ ໃຫ້ວິສາຫະກິດ ແບບຂາດຕົດຂາດຕໍ່. ມີຄວາມອາດສາມາດບົ່ມຊ້ອນ ຢ່າງຫລວງຫລາຍໃນການນຳໃຊ້ ລະບົບເຮັດວຽກງານ ຂອງອຸປະກອນເປັນຫລາຍໆຊຸດ. ພ້ອມກັນນີ້ ກໍ່ອາດໄດ້ຮັບຜົນບໍ່ຫນ້ອຍຈາກການເພີ່ມທະວີຈັງຫວະຄວາມໄວ ໃນການເຮັດວຽກງານ ຂອງເຄື່ອງຈັກ ແລະ ຈາກການເລັ່ງລັດການວິວັດ ແຫ່ງການຜະລິດ ແລະ ອື່ນໆ.

ການເປີດກວ້າງລັກສະນະເປັນເຈົ້າຕົນເອງ ຂອງວິສາຫະກິດ ແລະການ ຂະຫຍາຍຄວາມອາດສາມາດ ທາງດ້ານການເງິນຂອງມັນອອກຕື່ມ ລ້ວນແຕ່-ເປັນເງື່ອນໄຂສະດວກ ເພື່ອຍົກສູງສະມັດຖະພາບໃນການລົງຫຶນ. ໂດຍສວຍ ໃຊ້ພາຫະນະຫຶນຮອນຂອງຕົນເອງ ແລະ ສິນເຊື່ອ ວິສາຫະກິດໄດ້ມີ ຄວາມ ອາດສາມາດ ນຳເອົາອຸປະກອນເຕັກນິກອັນໃຫມ່ ເຂົ້າມາປ່ຽນອັນເກົ່າແກ່ ທີ່ຫລ້າສະໄຫມ ແລະ ໃຊ້ມາດຕະການເພື່ອດັດແກ້ອຸບປະກອນໃຫ້ມີລັກສະນະທັນ ສະໄຫມ ໃນກໍລະນີທີ່ມັນກຸ້ມຄ່າທາງດ້ານເສດຖະກິດ. ພ້ອມກັນນີ້ ການຕ້ອງ-ຈ່າຍຄ່າຫຶນການຜະລິດພື້ນຖານ ແລະ ພາຫະນະຫມູນວຽນເປັນວັດຖຸ ກໍ ເຮັດ ໃຫ້ວິສາຫະກິດ ເພີ່ມຄວາມສົນໃຈໃນການນຳໃຊ້ຫຶນດັ່ງກ່າວໃຫ້ໄດ້ດີກວ່າເກົ່າ.

ຜ່ານການວິວັດແຫ່ງການນຳໃຊ້ ເຂົ້າໃນການຜະລິດ ຫຶນພື້ນຖານກໍ່ຄ່ອຍໆ ມີການຫລຸຍຫ້ຽນ.

ເພີ່ນເຄີຍມີການຈຳແນກ ອອກເປັນການຫລຸ້ຍຫ້ຽນສອງປະເພດຄື -ການ ຫລຸ້ຍຫ້ຽນທາງກົງ ແລະ ການຫລຸ້ຍຫ້ຽນທາງອ້ອມ. <u>ການຫລຸ້ຍຫ້ຽນທາງກົງ</u>-

ແມ່ນການຫລ້ຽຫຽນຂອງທົ່ນພົນຖານພາຍຫລັງທີ່ໄດ້ຮັບການກະທົບທາງກົງ ຫລື ທາງດ້ານທາດເຄມີ ໃນການຜະລິດ ຫລື ພາຍໃຕ້ຜົນສະທ້ອນຈາກທຳມະຊາດ. ການຫລ້ຽຫຽນທາງອ້ອມ ເກີດຂຶ້ນໃນເມື່ອຄວາມກ້າວໜ້າທາງດ້ານເຕັກ ນິກ ມີການຄຶບໜ້າຂະຫຍາຍຕົວ. ການຫລ້ຽຫຽນປະເພດນີ້ ໝາຍເຖິງວ່າ ເມື່ອເຕັກນິກຫາກມີຄວາມຄຶບໜ້າຂະຫຍາຍຕົວແລ້ວ ມັນກໍ່ບໍ່ມີປະໂຫຍດຫຍັງ ອີກແລ້ວ ທີ່ຈະໄປໃຊ້ເຄື່ອງຈັກ ອຸປະກອນເກົ່າແກ່ ຖ້າຫຽບໃສ່ເຄື່ອງຈັກອຸປະກອນໃໝ່ ທີ່ມີສະມັດຖະພາບສູງກວ່າ ແລະ ມີລາຄາຖືກກວ່າ.

ສະຫລຸບແລ້ວ ເຖິງວ່າເຄື່ອງຈັກແລະພາກສ່ວນປະກອບອັນອື່ນຢູ່ໃນທຶນພົນຖານ ຈະຍັງໃຊ້ໄດ້ຢູ່ ທາງຮູບນອກຂອງມັນ ແຕ່ມັນພັດຖືກຖືວ່າຫລ້າ ສະໄໝໄປແລ້ວ ຍ້ອນແນວນີ້ ຈຶ່ງຈຳເປັນຕ້ອງໄດ້ດັດແປງອຸປະກອນ ໃຫ້ມີ ລັກສະນະທັນສະໄໝຢ່າງມີແຜນການ, ນຳໃຊ້ ອຸປະກອນດ້ວຍກາວຢ່າງໝົດແຮງ ຂອງມັນ, ແກ້ໄຂບໍ່ໃຫ້ມີການປ່ອຍປະໃຫ້ ອຸປະກອນຢຸດສະງັກຢູ່ລ້ຳໆ ບໍ່ມີການເຄື່ອນໄຫວ ໂດຍບໍ່ມີເຫດຜົນ ແລະ ອື່ນໆ ທັງນີ້ເພື່ອຫລຸດຜ່ອນບໍ່ໃຫ້ມີການ-ເສຍຫາຍທີ່ພົ້ນເຖິງການຫລ້ຽຫຽນທາງອ້ອມຂອງທຶນພົນຖານ.

ມີການຫົດແທນຄືນ ທຶນພົນຖານທີ່ຫລ້ຽຫຽນໄປແລ້ວນັ້ນ ໂດຍສ່ວຍໃຊ້ເງິນຄ່າຫລ້ຽຫຽນ ທີ່ໄດ້ມາຈາກການນຳເອົາພາກສ່ວນໜຶ່ງ ຂອງມູນຄ່າ ທຶນພົນຖານ ທີ່ສອດຄ່ອງເໝາະສົມກັບການຫລ້ຽຫຽນຂອງມັນນັ້ນ ເພີ່ມເຂົ້າ ໃສ່ມູນຄ່າຜະລິດຕະພັນ ທີ່ຜະລິດຂຶ້ນໃໝ່. ລັດມີການນຳໃຊ້ພາກສ່ວນໜຶ່ງ ຂອງເງິນຄ່າຫລ້ຽຫຽນ ຂອງບັນດາລັດວິສາຫະກິດອຸດສາຫະກຳ ເພື່ອຫົດແທນ ຄືນຄ່າທຶນພົນຖານທີ່ໝົດໄປແລ້ວນັ້ນ ແລະ ສະເພາະອີກພາກສ່ວນໜຶ່ງ ກໍ່ໝໍ່ວິສາຫະກິດເປັນຜູ້ຊຶມໃຊ້ ແລະ ໃຊ້ຈ່າຍເຂົ້າໃນການຟື້ນຟູທຶນພົນຖານຄືນ ຢ່າງສົມບູນ.

ບໍ່ລຸມາດທຶນພົນຖານຂອງລັດວິສາຫະກິດ ມີການເພີ່ມຂຶ້ນຕົ້ນຕໍກໍ່ແມ່ນ ຈາກພາກສ່ວນສະສົມຂອງລາຍໄດ້ແຫ່ງຊາດ. ນັບແຕ່ປີ ໑໙໑ມ ເຖິງປີ ໑໙໕໐ທຶນພົນຖານແຫ່ງການຜະລິດຂອງ ສ.ສ.ສ.ຊ ທັງໝົດ ໄດ້ເພີ່ມຂຶ້ນ ๔๘ ເທື່ອ ແລະ ໄດ້ເທົ່າກັບ ๑.๑๔๗ ຕຣຸບ.

ນອກຈາກທຶນພົນຖານແຫ່ງການຜະລິດແລ້ວ ຢູ່ໃນສັດຖະກິດແຫ່ງຊາດ ກໍ່ຍັງມີທຶນພົນຖານທີ່ບໍ່ແມ່ນການຜະລິດ. ທຶນພົນຖານທີ່ບໍ່ແມ່ນການຜະລິດແມ່ນຊັບ

ສົມບັດຂອງລັດສັງຄົມນິຍົມ ຫລື ຂອງສະຫະກອນ ທີ່ຮັບໃຊ້ການຊຸມໃຊ້ທີ່ດິນ ການຜະລິດ ໃນໄລຍະໃດໜຶ່ງ. ນັບເຂົ້າຢູ່ໃນກອງທຶນພື້ນຖານ ທີ່ດິນການຜະລິດ ກໍ່ເຮືອນຊານ, ຕຶກ, ເຄຫາສະຖານ ແລະ ອຸປະກອນຂອງສະຖາບັນ ແລະ ອົງການຈັດຕັ້ງ ທີ່ເຮັດວຽກສຶກສາ, ສາທາລະນະສຸກ, ລະບົບບໍລິການຢູ່ໃນຕົວເມືອງ, ຊົນຄອງ, ວັດທະນະທຳ ແລະ ອື່ນໆ.

ທຶນໝຸນວຽນ

ທຶນໝຸນວຽນ ແມ່ນພາກສ່ວນພາຫະນະການຜະລິດ ຊຶ່ງໃຊ້ເຂົ້າໃນ ການຜະລິດຢ່າງຄົບຖ້ວນ ໃນໄລຍະການຜະລິດ-ຮອບໜຶ່ງ ແລະ ມູນຄ່າທັງໝົດຂອງມັນກໍ່ແມ່ນ ສິ່ງເຂົ້າໄປຢູ່ໃນຜະລິດຕະພັນສຳເລັດຮູບ.

ນັບເຂົ້າເປັນວັດຖຸ ຢູ່ໃນພາກສ່ວນທຶນໝຸນວຽນກໍ່ມີ: ๑) ວັດຖຸຮັບໃຊ້ - ການຜະລິດ ທີ່ສະສົມແຮ ໄວ້ຢູ່ໃນສາງ, ວັດຖຸດິບ, ພັດສະດຸຕົ້ນຕໍ ແລະ ສຳ-ຮອງ, ເຊື້ອເພີງ, ຜະລິດຕະພັນເຄິ່ງສຳເລັດຮູບ ທີ່ຊຸເຂົ້າມາ, ເຄື່ອງ ອາໄລ່ສຳລັບໃຊ້ການສ້ອມແປງປະຈຳວັນ, ເຄື່ອງມືໜ່ວຍລາຄາບໍ່ສູງ ແລະ ຫລັຍ-ຫັຽນໄວ, ພັດສະດຸ ແລະ ອື່ນໆ. ๘) ການຜະລິດທີ່ບໍ່ທັນສຳເລັດເທື່ອ, ຜະລິດຕະພັນເຄິ່ງສຳເລັດຮູບ ແລະ ການໃຊ້ຈ່າຍເພື່ອຮັບໃຊ້ວຽກງານໃນຂັ້ນ ຕໍ່ໄປ (ການໃຊ້ຈ່າຍເຂົ້າໃນການຜະລິດເຄື່ອງແມ່ວໃໝ່, ວຽກງານກະກຽມ- ແລະ ວຽກງານອື່ນໆ ສຳລັບໄລຍະຍາວນານ).

ອາດຈະສະແດງພາກສ່ວນປະກອບຂອງກອງທຶນໝຸນວຽນ ຂອງລັດ ວິສາຫະກິດ ດ້ວຍຕາຕະລາງ(ເບິ່ງ ໜ້າ 494).

ພາຫະນະໝຸນວຽນ

ນອກຈາກ ທຶນພື້ນຖານ ແລະ ທຶນໝຸນວຽນແລ້ວ ວິສາຫະກິດ ຍັງຕ້ອງການໃຫ້ມີທຶນເພີ່ມເຕີມເພື່ອຮັບໃຊ້ຂົງເຂດການຈໍລະຈອນ. ມັນມີການຈຳໜ່າຍຜະລິດຕະພັນ ທີ່ເຮັດອອກມາຢູ່ວິສາຫະກິດສັງຄົມນິຍົມຢ່າງມີແຜນການ ແລະ ວິສາຫະກິດກໍ່ໄດ້ຮັບເງິນ ຄ່າຜະລິດຕະພັນດັ່ງກ່າວ. ຈາກນີ້ກໍ່ເຫັນໄດ້ວ່າ ໃນໄລຍະໃດໜຶ່ງສະເພາະວິສາຫະກິດທີ່ເຄື່ອນໄຫວ ເສດຖະກິດແບບຊຸມດ່ຽວ ແລະ ມີພົນກຳໄລ ແມ່ນມີ (ຄຽງຄູ່ກັບທຶນພື້ນຖານ ແລະ ໝຸນວຽນແຫ່ງການຜະລິດແລ້ວ) ຜະລິດ ຕະພັນສຳເລັດຮູບຈຳນວນໜຶ່ງ ທີ່ຢູ່ໃນຂັ້ນລໍຖ້າການຈຳໜ່າຍ ແລະ ມີທຶນຮອນທີ່



ໄດ້ມາຈາກ ການຈຳໜ່າຍຜະລິດຕະພັນທີ່ຜະລິດອອກມາແລ້ວ ແລະ ມີ ການ ກຽມພ້ອມອອກໄປຈຳໜ່າຍ ຊຶ່ງສະສົມຢູ່ໃນວິສາຫະກິດ ກົດໝຸນຮອບຂອງວິສາ ຫະກິດທີ່ຈຳເປັນເພື່ອເອົາໄປຊື້ວັດຖຸດິບ, ເຊື້ອເພີງ ແລະ ອື່ນໆ ລ້ວນແຕ່ປະ ກອບເປັນ <u>ທຶນສຳລັບການຈໍລະຈອນ</u>.

ທຶນໝຸນວຽນ ແລະ ທຶນສຳລັບການຈໍລະຈອນຄິດໄລ່ເປັນເງິນ ປະ ກອບ

ເຂົ້າເປັນ <u>ພາຫະນະຫມູນວຽນ</u> ຂອງວິສາຫະກິດ. ສອງພາກສ່ວນປະກອບ-ອັນນີ້ ຂອງພາຫະນະຫມູນວຽນ ມີການຮັບໃຊ້ ການຜະລິດແບບຕ່າງກັນ: ທຶນ ຫມູນວຽນແມ່ນເຄື່ອນໄຫວຢູ່ໃນຂົງເຂດການຜະລິດ, ທຶນສຳລັບການຈໍລະຈອນ ແມ່ນເຄື່ອນໄຫວຢູ່ໃນຂົງເຂດການຈໍລະຈອນ. ທຶນທັງສອງນີ້ ແມ່ນເຄື່ອນໄຫວ ຢູ່ໃນຂອບເຂດ ຮອບຫມູນວຽນຂອງພາຫະນະຂອງວິສາຫະກິດ.

ພາຫະນະຫມູນວຽນຂອງວິສາຫະກິດສັງຄົມນິຍົມ ແບ່ງອອກເປັນປະເພດທີ່ ເປັນຂອງຕົນເອງ ແລະ ປະເພດກູ້ຢືມ.ແມ່ນລັດທີ່ເປັນຜູ້ປະກອບພາຫະນະ - ຫມູນວຽນປະເພດຂອງຕົນເອງ ໃຫ້ລັດວິສາຫະກິດ ໃນຂອບເຂດເທົ່າກັນ ກັບ ຄວາມຮຽກຮ້ອງຕ້ອງການ ໃນລະດັບຕຳ່ສຸດ ຂອງວິສາຫະກິດ ຊຶ່ງມີຄວາມຈຳ ເປັນ ເພື່ອປະຕິບັດແຜນການ ການຜະລິດໃຫ້ໄດ້. ຄວາມຮຽກຮ້ອງຕ້ອງການ ຂອງ ວິສາຫະກິດ ກ່ຽວກັບທຶນຮອນ ໃນໄລຍະຕ່າງໆ ໃນຫມົດປີ ຊຶ່ງພົວ ພັນ ກັບການສະສົມ ວັດຖຸດິບ ແລະ ເຊື້ອເພີງໄວ້ປະຈຳລະດູ ກໍ່ຄືການພົວພັນກັບກໍ ລະນີສິນຄ້າພວມຢູ່ລະຫວ່າງທາງ ແລະ ອື່ນໆ ໄດ້ຮັບການແກ້ໄຂ ໂດຍອີງໃສ່ ທຶນຮອນທີ່ກູ້ຢືມມາຈາກທະນາຄານແຫ່ງລັດ. ສິນເຊື່ອທີ່ໄດ້ຮັບມານັ້ນຈະຕ້ອງມີ ການສົ່ງຄືນ ພາຍໃນກຳນົດເວລາ ທີ່ໄດ້ວາງໄວ້ຢ່າງຄັກແນ່ (ບໍ່ໃຫ້ເກີນ ປີ ຫນຶ່ງ) ໂດຍມີການຈ່າຍຄ່າດອກເບ້ຍ .

ການທີ່ວິສາຫະກິດ ໄດ້ຮັບທຶນຮອນ ພຽງແຕ່ຢູ່ໃນຂອບເຂດ ລະດັບອັນຕຳ່ ສຸດ ກໍ່ອາດຈະອະທິບາຍໄດ້ຢູ່ບ່ອນວ່າ ເຮັດຄືແນວນີ້ ຈະເປັນການຊຸກຍູ້ ສົ່ງ ເສີມໃຫ້ມີການນຳໃຊ້ທຶນຮອນດັ່ງກ່າວ ແບບປະຢັດ ແລະ ມີການເລັ່ງລັດຮອບ ຫມູນວຽນຂອງມັນຂຶ້ນຕື່ມ.

ການຫມູນວຽນຂອງ ພາຫະນະຫມູນວຽນ

ການຫມູນວຽນຂອງພາຫະນະຫມູນວຽນແມ່ນຫນຶ່ງ ໃນຕົວເລກກຳນົດຫມາຍສະຫລຸບລວມຍອດທີ່ເວົ້າ ເຖິງລັກສະນະສະເພາະ ທາງດ້ານເສດຖະກິດ-ຂອງການເຄື່ອນໄຫວ ຂອງວິສາຫະກິດ ແລະ ອົງການຈັດຕັ້ງເສດຖະກິດ.ພາ ຫະນະຫມູນວຽນ ຂອງວິສາຫະກິດ ແລະ ອົງການຈັດຕັ້ງເສດຖະກິດ ແມ່ນ ຢູ່ ໃນສະພາບມີການເຄື່ອນເຫນັງຢ່າງເປັນປະຈຳ ໂດຍຜ່ານກາຍສາມຂັ້ນ ລຽນ ກັນ. ການເຄື່ອນເຫນັງ ຢ່າງເປັນປະຈຳດັ່ງກ່າວນີ້ ຂອງພາຫະນະຫມູນວຽນ

ແມ່ນຮອບໝູນວຽນຂອງພາຫະນະໝູນວຽນ.

ຢູ່ໃນຂັ້ນທະວີດຂອງຮອບໝູນວຽນ ພາຫະນະໝູນວຽນ ຂອງລັດວິສາຫະກິດ ມີການປ່ຽນຈາກຮູບການເປັນເງິນ ມາເປັນຮູບການພາກສ່ວນສະສົມ ແຮໄວ້ ຮັບໃຊ້ການຜະລິດ ໝາຍວ່າມັນມີການປ່ຽນແປງ ມາເປັນພາຫະນະການຜະລິດ ທີ່ໜ້າທີ່ຮັບໃຊ້ການຜະລິດ.

ຢູ່ໃນຂັ້ນທີສອງຂອງຮອບໝູນວຽນ ພາກສ່ວນທີ່ສະສົມໄວ້ ເພື່ອຮັບໃຊ້ - ການຜະລິດຖືກຊົມໃຊ້ ແລະ ຫັນປ່ຽນໄປເປັນສິນຄ້າສຳເລັດຮູບ. ຢູ່ຂັ້ນນີ້ ພາຫະນະໝູນວຽນ ແມ່ນຢູ່ໃນຂົງເຂດການຊົມໃຊ້ ທີ່ແມ່ນການຜະລິດ. ຢູ່ໃນຂັ້ນທີສາມ ມີການຈຳໜ່າຍສິນຄ້າ ທີ່ຜະລິດອອກໂດຍວິສາຫະກິດ ແລະ ພາ ຫະນະໝູນວຽນກໍມີຮູບການເປັນເງິນ. ເງິນຖືກຈ່າຍໄປຕື່ມອີກເທື່ອໜຶ່ງເຂົ້າໃນ ການຊຸພາກສ່ວນສະສົມໄວ້ ເພື່ອຮັບໃຊ້ການຜະລິດ ແລະ ອື່ນໆ ໝາຍຄວາມ ວ່າ ທັງໝົດຮອບໝູນວຽນ ເລີ່ມຕົ້ນຄືນມາໃໝ່.

ໄລຍະເວລາທີ່ພາຫະນະໝູນວຽນ ຜ່ານທັງໝົດສາມຂັ້ນ ຂອງຮອບໝູນ ວຽນ ຂອງມັນນັ້ນ ປະກອບເຂົ້າກັນເປັນຮອບການໝູນວຽນເຕັ້ມ. ການເລັ່ງ ລັດຮອບໝູນວຽນຂອງພາຫະນະໝູນວຽນ ເປັນເງື່ອນໄຂຊ່ວຍໃຫ້ວິສາຫະກິດ ທັນການເຄື່ອນໄຫວເສດຖະກິດ ແບບ ຄຸນຄ່ຽ ແລະ ມີຜົນກຳໄລ ສາ ມາດ ຫລຸດຜ່ອນການສະສົມວັດຖຸດິບ, ພັດສະດຸ ແລະ ວັດຖຸອື່ນໆ ທີ່ໃຊ້ເຂົ້າໃນການ ຜະລິດ ເຮັດໃຫ້ມີ ຄວາມອາດສາມາດເພື່ອປົດປ່ອຍເອົາພາກສ່ວນ ໜຶ່ງ ຂອງພາຫະນະໝູນວຽນໄປໃຊ້ເຂົ້າໃນການເປີດກວ້າງການຜະລິດ ຢູ່ໃນວິສາ ຫະກິດດັ່ງກ່າວ ຫລື ນຳໃຊ້ມັນ ຢູ່ໃນຂະແໜງການອື່ນໆ ຂອງເສດຖະກິດ - ແຫ່ງຊາດ.

<u>ຄວາມໄວຂອງການໝູນວຽນພາຫະນະ ຂອງວິສາຫະກິດ</u> ແມ່ນຂຶ້ນກັບເວ ລາໃນການຜະລິດ ແລະ ເວລາ ໃນການຈໍລະຈອນ (ພາຍໃຕ້ຮູບການມີການ ສະສົມຜະລິດຕະພັນສຳເລັດຮູບ ທີ່ກຽມພ້ອມໃຫ້ເອົາໄປຈຳໜ່າຍໄດ້ ແລະ ອື່ນໆ). ຍ້ອນແນວນີ້ ປັດໄຈອັນຕົ້ນຕໍ ເພື່ອເລັ່ງລັດລັກສະນະໝູນວຽນຂອງ ພາຫະນະໝູນວຽນ ຈຶ່ງແມ່ນບັນຫາການຫລຸດຜ່ອນ ເວລາໃນການຜະລິດແລະ ຫລຸດຜ່ອນເວລາ ໃນການຈໍລະຈອນ ກໍຄືປ່ຽນແປງໃຫ້ມີການສະສົມ ເກີນ ກຳ ນົດໝາຍ ທີ່ໄດ້ວາງໄວ້. ການເລັ່ງລັດລັກສະນະ ໝູນວຽນຂອງທຶນຮອນ ມີ

ຄວາມຫມາຍອັນຍິ່ງໃຫຍ່ ຢູ່ໃນເສດຖະກິດແຫ່ງຊາດ.

ມ. ການໃຊ້ຈ່າຍໃນການຜະລິດ ກັບລະບົບລາຄາ

ຕົ້ນທຶນການຜະລິດໃນເສດຖະກິດ ສັງຄົມນິຍົມ ແລະ ໂຄງປະກອບ ຂອງຕົ້ນທຶນການຜະລິດ

ຄຸນຄ່າຂອງຜະລິດຕະພັນຢູ່ໃນສັງຄົມ ສັງຄົມນິຍົມ ປະກອບດ້ວຍສາມພາກ ສ່ວນຄື: ๑) ຄຸນຄ່າຂອງພາ ຫະ ນະການຜະລິດ ທີ່ໄດ້ມີການ ຊົມໃຊ້ ໄປແລ້ວ, ๘) ຄຸນຄ່າຜະລິດຕະພັນທີ່ສ້າງຂຶ້ນມາ ໂດຍແຮງງານອັນຈຳເປັນ, ມ) ຄຸນຄ່າຜະລິດຕະພັນທີ່ສ້າງຂຶ້ນມາ ໂດຍແຮງງານ ທີ່ເປັນສ່ວນເກີນ.

ຄຸນຄ່າຜະລິດຕະພັນຢູ່ໃນສັງຄົມ ສັງຄົມນິຍົມ ປະກອບເປັນການໃຊ້ ຈ່າຍ ຂອງສັງຄົມ ທີ່ໃຊ້ເຂົ້າໃນການຜະລິດ. ສອງພາກສ່ວນທຳອິດ ຂອງການໃຊ້ ຈ່າຍ ຂອງສັງຄົມເຂົ້າໃນການຜະລິດ ປະກອບເຂົ້າເປັນຕົ້ນທຶນການຜະລິດ - ຂອງວິສາຫະກິດສັງຄົມນິຍົມ. ພາກສ່ວນທີ່ສາມຂອງຄຸນຄ່າ ປະກອບເຂົ້າເປັນ ລາຍໄດ້ສົດ ຂອງສັງຄົມ.

ເຖິງວ່າຈະບໍ່ມີການຂຶ້ນແຜນການ ກ່ຽວກັບຕົ້ນທຶນການຜະລິດ ໃຫ້ວິສາຫະ ກິດສັງຄົມນິຍົມ ຢ່າງລວມສູນກໍ່ຕາມ ແຕ່ວ່າມັນກໍ່ມີຄວາມຫມາຍສຳຄັນສຳລັບ-ເສດຖະກິດແຫ່ງຊາດ. ການຄຳນຶງເຖິງຕົ້ນທຶນການຜະລິດ ມີຄວາມຫມາຍອັນ ໃຫຍ່ຫລວງ ເພື່ອເລີ່ມຕົ້ນນຳໃຊ້ການເຄື່ອນໄຫວເສດຖະກິດແບບດຸນດ່ຽງແລະ ມີຜົນກຳໄລ ເຂົ້າໃນຕົວຈິງ.

ຢູ່ໃນອຸດສາຫະກຳ ເພີ່ນມີການຈຳແນກອອກເປັນ <u>ຕົ້ນທຶນການຜະລິດຂອງ ໂຮງຈັກ ໂຮງງານ</u> ທີ່ປະກອບມີການໃຊ້ຈ່າຍ ເຂົ້າໃນການຜະລິດ**ຜະລິດຕະ**ພັນ ແລະເປັນ<u>ຕົ້ນທຶນການຜະລິດອັນສົມບູນ</u> ຊຶ່ງຢູ່ໃນຫັ້ນ ນອກຈາກຕົ້ນທຶນການ ຜະລິດຂອງໂຮງຈັກ-ໂຮງງານແລ້ວ ຍັງມີການໃຊ້ຈ່າຍທັງຫມົດ ຂອງວິສາຫະ ກິດດັ່ງກ່າວ ທີ່ພົວພັນກັບການຂາຍຜະລິດຕະພັນອອກ ແລະ ກໍ່ມີການໃຊ້ ຈ່າຍ ເພື່ອຮັບໃຊ້ວຽກງານອື່ນໆ (ວຽກຂົນສົ່ງ, ວຽກຫຸ້ມຫໍ່, ການໃຊ້ຈ່າຍເພື່ອວຽກບໍ ລິຫານຂອງ ຕຮັດ ແລະ ກົມບີນາ, ລາຍຈ່າຍຄ່າກໍ່ສ້າງພະນັກງານ, ຄ່າໂຄ ສະນາເຕັກນິກ, ຄ່າບໍລິການຂອງສະຖາບັນຄົ້ນຄວ້າວິທະຍາສາດ).

ຕົ້ນທຶນການຜະລິດອຸດສາຫະກຳ ມີໂຄງປະກອບຄືແນວໃດ ?

ອີງຕາມຈຸດພິເສດທາງດ້ານເສດຖະກິດ ທີ່ສອດຄ່ອງກັບສ່ວນປະກອບຂອງ ພາກສ່ວນທີ່ເປັນພື້ນຖານຢູ່ໃນການຜະລິດ ການໃຊ້ຈ່າຍເຂົ້າໃນການຜະລິດທັງ ໝົດ ຂອງວິສາຫະກິດ ແມ່ນມີການເຕົ້າໂຮມເຂົ້າເປັນໝວດ ທີ່ເປັນທາດ - ດຽວກັນ ດັ່ງຕໍ່ໄປນີ້.

ຄ) ຄ່າແຮງງານ ແລະ ອັດຕາຄິດໄລ່ເພີ່ມເຕີມໃສ່ຄ່າແຮງງານ.

ງ) ການໃຊ້ຈ່າຍຄ່າວັດຖຸດິບ, ພັດສະດຸ, ເຊື້ອເພີງ ແລະພະລັງ ງານ ໄຟຟ້າ .

ຈ) ເງິນຄ່າຫລ້ຽຫ້ຽນ ເພື່ອທົດແທນຄືນ ຄຸນຄ່າຂອງພາກສ່ວນພາຫະນະ ອັນຕົນຕໍ ທີ່ມີການຫລ້ຽຫ້ຽນ .

ສ) ການໃຊ້ຈ່າຍລວມຂອງໂຮງງານ ແລະ ຂອງພະແນກການຜະລິດ ທີ່ ພົວພັນກັບອຸຽກງານຄຸ້ມຄອງ ແລະ ອຽກງານຮັບໃຊ້ການຜະລິດ.

ພາກສ່ວນປະກອບຕ່າງໆ ມີອັດຕາສ່ວນແຕກຕ່າງກັນ ຢູ່ໃນຕົ້ນທຶນການຜະ ລິດ ຊຶ່ງຂຶ້ນກັບເງື່ອນໄຂ ແລະ ຈຸດພິເສດສະເພາະຂອງຂະແໜງການຜະລິດ ເຊິ່ງຂຶ້ນກັບລະດັບການປະກອບເຕັກນິກ ເຂົ້າໃນຂະແໜງການດັ່ງກ່າວແລະກັບ ການຈັດຕັ້ງການຜະລິດ ແລະ ການອອກແຮງງານ.

ວິທີການຕົ້ນຕໍເພື່ອຫລຸດຜ່ອນຕົ້ນທຶນການຜະລິດ ທີ່ຮັບປະກັນໃຫ້ມີການ ປະ ຢັດ ໃນການໃຊ້ຈ່າຍແຮງງານ ຂອງສັງຄົມ ຢູ່ໃນໜົດທຸກຂະ ແໜງ ການຂອງເສດຖະກິດແຫ່ງຊາດນັ້ນກໍແມ່ນ: ການຍົກສູງສະມັດຖະພາບ ຂອງ ການອອກແຮງງານ ຂອງກຳມະກອນຜູ້ຮັດວຽກງານ; ການຫລຸດຜ່ອນການ-ໃຊ້ຈ່າຍວັດຖຸດິບ, ພັດສະດຸ, ເຊື້ອເພີງ: ພະລັງງານໄຟຟ້າເຂົ້າໃນການຜະ ລິດ ຜະລິດຕະພັນຫົວໜ່ວຍໜຶ່ງ, ການຫລຸດຜ່ອນການໃຊ້ຈ່າຍເຂົ້າໃນ ວຽກ ງານບໍລິຫານ ແລະ ຄຸ້ມຄອງ.

ຄວາມໝາຍຂອງການຫລຸດຜ່ອນຕົ້ນທຶນການຜະລິດ ສຳລັບເສດຖະກິດ - ແຫ່ງຊາດ ກ່ອນອື່ນໝົດ ແມ່ນຢູ່ບ່ອນວ່າ ການຫລຸດຜ່ອນຕົ້ນທຶນການຜະລິດ ມີ ຜົນສະທ້ອນບໍ່ສະເພາະພຽງແຕ່ ຕໍ່ການມີຜົນກຳໄລ ຂອງວິສາຫະກິດໃດໜຶ່ງ-ສະເພາະເທົ່ານັ້ນ ແຕ່ນັ້ນຍັງມີຜົນສະທ້ອນ ຕໍ່ການເຕີບໃຫຍ່ຂະຫຍາຍຕົວ - ຂອງການສະສົມ ອັນທີ່ນຳໃຊ້ເຂົ້າ ເພື່ອເປີດກ້ວ້າງການຜະລິດສຳ ແບບ ສັງ

ຄົມນິຍົມ ແລະ ເພື່ອຍົກລະດັບຄວາມເປັນຢູ່ທາງດ້ານວັດຖຸ ແລະ ວັດທະນະ-ທຳ ຂອງປະຊາຊົນຂັ້ນຕົ້ນ. ຍ້ອນແນວການຕໍ່ສູ້ເພື່ອຫລຸດຜ່ອນຕົ້ນທຶນການຜະລິດ ຈຶ່ງມີຄວາມໝາຍອັນໃຫຍ່ຫລວງ.

ຜະລິດຕະພັນ ທີ່ຜະລິດອອກມາໄດ້ ຢູ່ວິສາຫະກິດສັງຄົມນິຍົມ ລ້ວນແຕ່ຖືກນຳສິ່ງເຂົ້າໄປໃນການໝູນວຽນ ຈຳລະຈອນ ຂອງເສດຖະກິດແຫ່ງຊາດ ໂດຍມີລາຄາໃດໜຶ່ງສະເພາະເຈາະຈົງ. ຄວາມແຕກຕ່າງກັນລະຫວ່າງ ລາຄາ-ຜະລິດຕະພັນດັ່ງກ່າວ ກັບ ການໃຊ້ຈ່າຍຂອງວິສາຫະກິດສັງຄົມນິຍົມໃນການ-ຜະລິດ ແລະ ການຈຳໜ່າຍຜະລິດຕະພັນນັ້ນ (ໝາຍຄວາມວ່າຕົ້ນທຶນ ການຜະລິດ) ປະກອບເປັນລາຍໄດ້ສຸດ ຂອງສັງຄົມ.

ລາຍໄດ້ສຸດ ແລະ ສອງ ຮູບການ ຂອງມັນ

ລາຍໄດ້ສຸດ ແມ່ນມູນຄ່າທີ່ຄົນໄລ່ເປັນເງິນຂອງ ຜະລິດຕະພັນສ່ວນເກີນ ທີ່ສ້າງຂຶ້ນໂດຍແຮງງານ ປະເພດສ່ວນເກີນຢູ່ໃນສັງຄົມ ສັງຄົມນິຍົມ ທັງ ໝົດ.

ລາຍໄດ້ສຸດ ຂອງສັງຄົມ ເຊັ່ນດຽວກັນກັບລາຍໄດ້ແຫ່ງຊາດ ແມ່ນ ສ້າງ ຂຶ້ນຢູ່ ໃນຂະແໜງການຕ່າງໆ ທີ່ດຳເນີນການຜະລິດວັດຖຸ. ລາຍໄດ້ສຸດ ທີ່ ສ້າງຂຶ້ນຢູ່ໃນວິສາຫະກິດ ຈຳນວນໜຶ່ງກໍປະໄວ້ໃຫ້ວິສາຫະກິດດັ່ງກ່າວຊົມໃຊ້-(ພາຍໃຕ້ຮູບການເປັນກຳໄລ) ແລະ ອີກຈຳນວນໜຶ່ງກໍໂອນໄປ ເຂົ້າລັດ. ລາຍໄດ້ສຸດ ກໍຍັງມີການສ້າງຂຶ້ນຢູ່ນາລວມອີກ. ພາກສ່ວນໜຶ່ງຂອງມັນກໍປະໄວ້ໃຫ້ນາລວມຊົມໃຊ້ ແລະ ອີກພາກສ່ວນໜຶ່ງກໍແມ່ນຖືກສົ່ງຜ່ານກົນໄກລາຄາ ແລະ ອາກອນລາຍໄດ້ໄປໃຫ້ລັດຊົມໃຊ້.

ລາຍໄດ້ສຸດ ປະກົດຕົວອອກມາ ໃນສອງຮູບການຕົ້ນຕໍຄື: ລາຍໄດ້ສຸດ - ລວມສູນຂອງລັດ ແລະ ລາຍໄດ້ສຸດ ຂອງລັດວິສາຫະກິດ(ກໍຄືຂອງນາລວມ)

ລາຍໄດ້ສຸດ ລວມສູນຂອງລັດ ແມ່ນພາກສ່ວນໜຶ່ງຂອງມູນຄ່າຜະລິດຕະ-ພັນສ່ວນເກີນ ຂອງສັງຄົມ ສັງຄົມນິຍົມ ທີ່ມີການເຕົ້າໂຮມຢູ່ໃນກຳມືຂອງ ລັດ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງທົ່ວປວງຊົນ. ລາຍໄດ້ ອັນນີ້ ຖືກນຳສົ່ງເຂົ້າງົບປະມານແຫ່ງລັດ ພາຍໃຕ້ຮູບການ ເປັນອາກອນຕ່ອເລກ,

ການປະກອບສ້າງລາຍໄດ້ສົດລວມສູນຂອງລັດ



ເປັນອັດຕາຫັກອອກຈາກກຳໄລ, ເປັນອັດຕາຄິດໄລ່ເພີ່ມເຕີມໃສ່ຄ່າແຮງງານ ເພື່ອຮັບໃຊ້ວຽກງານປະກັນໄພທາງສັງຄົມ, ເປັນອາກອນລາຍໄດ້ ຈາກວິສາ ຫະກິດແບບສະຫະກອນ.

ລາຍໄດ້ສົດ ລວມສູນຂອງລັດ ຖືກນຳໃຊ້ເພື່ອຕອບສະຫນອງ ຄວາມຕ້ອງ ການຂອງທົ່ວປວງຊົນ, ເພື່ອການລົງທຶນກໍ່ສ້າງພື້ນຖານ, ເພື່ອຮັບປະກັນລາຍ ຈ່າຍ ທີ່ຮັບໃຊ້ວຽກງານປ້ອງກັນຊາດ, ເພື່ອຮັບໃຊ້ວຽກງານສຶກສາ, ສາທາ ລະນະສຸກ, ວຽກງານກ່ຽວກັບເບ້ຍບຳນານ ແລະ ວຽກງານຄຸ້ມຄອງ ແລະ ອື່ນໆ.

<u>ລາຍໄດ້ສົດ ຂອງວິສາຫະກິດ</u> (ກຳໄລ) ແມ່ນພາກສ່ວນຄຸນຄ່າ ຜະລິດ ຕະພັນສ່ວນເກີນ ທີ່ຮັກສາໄວ້ຢູ່ນຳວິສາຫະກິດ. ຂະຫນາດລາຍໄດ້ສົດ ຂອງ ວິສາຫະກິດ ຂຶ້ນກັບລະດັບ ການປະຕິບັດແຜນການ ໃຫ້ສຳເລັດຜົນຕາມລະດັບ ຄາດຫມາຍ ແລະ ລົ້ນລະດັບຄາດຫມາຍ ແລະ ຂຶ້ນກັບການຫລຸດຜ່ອນ ຕົ້ນທຶນ ການຜະລິດລົງ. ວິສາຫະກິດຍິ່ງເຄື່ອນໄຫວວຽກງານໄດ້ດີເທົ່າໃດ, ຕົ້ນທຶນ ການຜະລິດຍິ່ງຕ່ຳເທົ່າໃດ, ລາຍໄດ້ສົດ ກໍ່ຍິ່ງຫລາຍເທົ່ານັ້ນ. ສິ່ງດັ່ງ ກ່າວ ມັນຮັບປະກັນເຮັດໃຫ້ຊາວຜູ້ອອກແຮງງານຫມົດທຸກຄົນ ຢູ່ວິສາຫະກິດ ມີຄວາມ ສົນໃຈ ທາງດ້ານວັດຖຸຕໍ່ການເພີ່ມລະດັບ ມີຜົນກຳໄລຂອງວິສາຫະກິດຂຶ້ນ.

ກຳໄລ ແລະ ການແບ່ງປັນກຳໄລ ລະຫວ່າງລັດ ກັບ ວິສາຫະກິດ

ຢູ່ໃນສັງຄົມ ສັງຄົມນິຍົມ ກຳໄລແມ່ນ ພາກສ່ວນໜຶ່ງ ຂອງລາຍຮັບສຸດຂອງ ສັງຄົມ ທີ່ຮັກສາໄວ້ ຢູ່ໃນວິສາຫະກິດ ນັ້ນ ຫລື ວິສາຫະກິດນີ້ ແລະ ແມ່ນວິສາຫະກິດເປັນຜູ້ຊຸມໃຊ້. ກຳໄລ ແມ່ນ ໜຶ່ງໃນບັນດາຕົວເລກກຳໜົດໝາຍ ສະຫລຸບລວມຍອດ ທີ່ສ່ອງແສງເຖິງປະ ສິດທິພາບ ໃນການເຄື່ອນໄຫວເສດຖະກິດ ຂອງວິສາຫະກິດ.

ພາຍໃຕ້ລະບອບສັງຄົມນິຍົມ ກຳໄລມີທາດແທ້ທາງດ້ານສັງຄົມແນວອື່ນ ທີ່ ແຕກຕ່າງກັນ ກັບລາຍໄດ້ຂອງນາຍທຶນ. ພາຍໃຕ້ລະບອບທຶນນິຍົມ ກຳໄລ - ສ່ອງແສງເຖິງການຂັດແຍ່ງແບບປໍລະປັກນຳກັນ ລະຫວ່າງການອອກແຮງງານ ກັບທຶນ. ໃນສະພາບ ເງື່ອນໄຂຂອງສັງຄົມນິຍົມ ກຳໄລແມ່ນໝາກຜົນ ການ ອອກແຮງງານສົມທົບກັນ ແບບລວມໝູ່ ຂອງຄົນທີ່ໄດ້ຮັບການປົດປ່ອຍ ອອກ ຈາກການກົດຂີ່ຂູດຮີດ. ພາຍໃຕ້ລະບອບທຶນນິຍົມ ກຳໄລແມ່ນເປົ້າໝາຍອັນ- ໜຶ່ງອັນດຽວທີ່ນັ້ນ ແລະ ທັງແມ່ນສາຍເຫດທີ່ມີກຳລັງແຮງຍູ້ໜູນ ການ ເຄື່ອນໄຫວຂອງນັກທຸລະກິດນາຍທຶນ. ພາຍໃຕ້ລະບອບສັງຄົມນິຍົມ ກຳໄລ - ແມ່ນພາຫະນະເສີມຂະຫຍາຍການຜະລິດ ເພື່ອແໃສ່ຮັດໃຫ້ປະຊາຊົນ ມີລະ ດັບຄວາມຢູ່ດີກິນດີ ເຕີບໃຫຍ່ຂະຫຍາຍຕົວອັນຢ່າງບໍ່ຢຸດຢັ້ງ.

ການແບ່ງປັນກຳໄລ ຢ່າງຖືກຕ້ອງເໝາະສົມ ລະຫວ່າງລັດ ກັບ ວິ ສາ ຫະກິດ ມີຄວາມໝາຍຢ່າງຫລວງຫລາຍ. ວິສາຫະກິດຫັກເອົາພາກສ່ວນ ໜຶ່ງ ຂອງກຳໄລ ໂອນເຂົ້າເປັນລາຍໄດ້ສົດແບບລວມສູນໃຫ້ລັດ. ໃຊ້ຈ່າຍສຳ ລັບ ທຶນການຜະລິດຖືກສົ່ງເຂົ້າໃນງົບປະມານ. ຢູ່ໃນຂະແໜງການອຸດສາຫະກຳ ຂອງ ສ.ສ.ສ.ຊ. ຕາມທຳມະດາແລ້ວ ລະດັບການໃຊ້ຈ່າຍສຳລັບທຶນ ການ ຜະລິດ ແມ່ນວາງກັນຢູ່ໃນ ຂອບເຂດ ຜ% ຂອງມູນຄ່າທຶນພື້ນຖານ ແລະພາຫະ ນະໜູນວຽນ. ການໃຊ້ຈ່າຍສຳລັບທຶນສະແດງເຖິງການພົວພັນທາງດ້ານເສດ ຖະກິດ ລະຫວ່າງທົ່ວໜົດສັງຄົມ ກັບ ວິສາຫະກິດໃດໜຶ່ງສະເພາະ ກຽວກັບ ການນຳໃຊ້ຊັບພະຍາກອນ ຂອງທ່ວປວງຊົນທີ່ໄດ້ມີການແຍກອອກມາໃຫ້ພວກ- ເຂົາເຈົ້າ. ພາລະໜ້າທີ່ພົ້ນຖານຂອງມັນ ແມ່ນການສ່ົງເສີມໃຫ້ມີການນຳໃຊ້ ທຶນການຜະລິດໃຫ້ໄດ້ດີກ່ວາເກົ່າ.

ໃນເມື່ອໃດຜະລິດຕະພັນຂະນິດນັ້ນ ຫລືຂະນິດນີ້ ຫາກມີຜົນກຳໄລສູງເກີນ

ຂອບເຂດ ໃນເມື່ອນັ້ນພາກສ່ວນໜຶ່ງຂອງລາຍໄດ້ກໍ່ອາດຈະມີການຖອກເຂົ້າ-ງົບປະມານ ເປັນຮູບການຊຳລະສະສາງ ໃນອັດຕາຄົງຕົວ (ລ່າດອກເບ້ຍ). ອາດຈະອະທິບາຍການທີ່ມີ ການຊຳລະສະສາງໃນອັດຕາຄົງຕົວ (ລ່າ ດອກ-ເບ້ຍ) ຈາກເຫດຜົນທີ່ວ່າ ວິສາຫະກິດ ມີກຳໄລເກີນສ່ວນ ໂດຍສະເພາະ-ແມ່ນຂະແໜງການຂຸດຄົ້ນບໍ່ແຮ. ໃນເມື່ອມີການຮັບປະກັນສະມັດຖະພາບ ໃນ ການອອກແຮງງານ ໃນລະດັບສູງ ໂດຍບໍ່ແມ່ນມາຈາກໜາກຜົນການເຄື່ອນ-ໄຫວເສດຖະກິດ ແຕ່ຫາກແມ່ນມາຈາກ ປັດໄຈທຳມະຊາດດ້ານດິນຟ້າອາກາດ ຍົກຕົວຢ່າງ, ການໃຊ້ຈ່າຍລ່າຂຸດຄົ້ນຖ່ານຫີນ ແບບເປີດໜ້າດິນ ເວລາໃດກໍ່ແມ່ນຕ່ຳກວ່າການໃຊ້ຈ່າຍລ່າຂຸດຄົ້ນແບບໃຕ້ດິນ. ຍ້ອນແນວນັ້ນພາກສ່ວນ ໜຶ່ງ ຂອງລາຍໄດ້ ທີ່ສະແດງເຖິງການຫລຸດລົ່ມກັນ ລະຫວ່າງການໃຊ້ຈ່າຍ ອັນຈຳ ເປັນທາງສັງຄົມ ກັບການໃຊ້ຈ່າຍຂອງສ່ວນຕົວບຸກຄົນ ເຂົ້າໃນການຜະລິດຜະ ລິດຕະພັນ ຢູ່ໃນເງື່ອນໄຂດ້ານທຳມະຊາດ ທີ່ອຳນວຍຄວາມສະດວກກວ່າ ຈຶ່ງ ມີການໂອນເຂົ້າງົບປະມານ ໃນຮູບການເປັນການຊຳລະສະສາງແບບຄົງ ຕົວ (ລ່າດອກເບ້ຍ).

ວິສາຫະກິດ ກໍ່ຍັງເສຍດອກເບ້ຍລ່າສົມເຊື່ອທີ່ໄດ້ຮັບມານັ້ນໃຫ້ທະນາຄານ.

ຫລັງຈາກໄດ້ມີການຊຳລະສະສາງ ແລະ ຖອກເງິນດັ່ງກ່າວນີ້ແລ້ວ ກໍ່ຍັງ ມີກຳໄລສົດເຫລືອຢູ່ (ຕາມການຄິດໄລ) ສຳລັບຮັບໃຊ້ເປັນບໍ່ເກີດ ເພື່ອ ປະ ກອບສ້າງ ສາມຄົງ ການຊຸກຍູ້ທາງດ້ານເສດຖະກິດຄື: ຄົງເພື່ອການ - ຍ້ອງຍໍສັນລະເສີນທາງດ້ານວັດຖຸ, ຄົງເພື່ອຮັບໃຊ້ວຽກງານທາງສັງຄົມ- ວັດ ທະນະທຳ ແລະ ວຽກງານກໍ່ສ້າງເຮືອນຊານ ແລະ ຄົງເພື່ອເສີມຂະຫຍາຍ-ການຜະລິດ. ຫລັງຈາກນັ້ນ ພາກສ່ວນໜຶ່ງຂອງກຳໄລ ກໍ່ຍັງຖືກນຳໃຊ້ ເພື່ອ ຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງວິສາຫະກິດຕາມແຜນການຊຸ່ມ ການລ້ຽງຫີນແບບລວມສູນ, ການເພີ່ມໃສ່ພາຫະນະຫມູນວຽນ ສະເພາະຂອງ-ຕົນເອງ ແລະ ການໃຊ້ຈ່າຍຕາມແຜນການລາຍການອື່ນໆ. ແລະ ສຸດ ທ້າຍ ສ່ວນເສດເຫລືອຂອງກຳໄລ ທີ່ບໍ່ທັນໄດ້ໃຊ້ສອຍ ກໍ່ມີການໂອນເຂົ້າງົບປະມານ ແຫ່ງລັດ.

ອາດຈະສະແດງໃຫ້ເຫັນລະບຽບ ໃນການແຍ່ງປັນກຳໄລ ດ້ວຍຕາຕະ - ລາງດັ່ງຕໍ່ໄປນີ້.



ລາຍໄດ້ສົດ (ກຳໄລ) ຂອງວິສາຫະກິດສັງຄົມນິຍົມ ເພີ່ມສູງຂຶ້ນຢ່າງບໍ່ຢຸດຢັ້ງ. ຕົວຢ່າງ, ກຳໄລຂອງບັນດາວິສາຫະກິດ ແລະ ອົງການຈັດຕັ້ງເສດຖະກິດຢູ່ ສ.ສ.ສ.ຊ ໃນປີ ຈນ.ຄ.ວ ເທົ່າກັບ ມ,ຄ ຕື້ຮຸບ, ໃນປີ ຈນ.ຜ.ຫ ມ.ຜ,ນ ຕື້ຮຸບ ແລະ ໃນປີ ຈນ.ຊ.ວ - ຈຈ.ຜ ຕື້ຮຸບ.

ການມີຜົນກຳໄລ ຂອງວິສາຫະກິດ

ຫລັກການເຄື່ອນໄຫວເສດຖະກິດ ແບບດຸນດ່ຽງແລະ ມີຜົນກຳໄລ ເຮັດໃຫ້ວິສາຫະກິດສັງຄົມນິຍົມ ຕົກຢູ່ໃນສະພາບທີ່ຈະຕ້ອງບຸກບົ້ນ ໃຫ້ມີການປະຢັດຊັບພະຍາກອນ-ຂອງຕົນໄດ້ຢ່າງສຸດຂີດ ແລະ ຈະຕ້ອງມີຜົນກຳໄລ. <u>ການມີຜົນກຳໄລ</u> (ການມີລາຍຮັບ) ຂອງວິສາຫະກິດ ຫມາຍຄວາມວ່າ ທຶນຮອນທີ່ວິສາຫະກິດໄດ້ຮັບມາຈາກການຈຳຫນ່າຍຜະລິດຕະພັນຂອງຕົນນັ້ນ ຈະຕ້ອງກຸ້ມບໍ່ສະເພາະ ພຽງແຕ່ລາຍຈ່າຍຕ່າງໆເທົ່ານັ້ນ ແຕ່ມັນກໍ່ຍັງຈະຕ້ອງຮັບປະກັນໃຫ້ມີກຳໄລອີກ.ຖ້າຫາກວ່າລາຍຈ່າຍ ເຂົ້າໃນການຜະລິດຂອງວິສາຫະກິດ ຫາກລົ່ນການໃຊ້ຈ່າຍອັນຈຳເປັນທາງສັງຄົມ ວິສາຫະກິດດັ່ງກ່າວ ກໍ່ຈະບໍ່ສາມາດກຸ້ມລາຍຈ່າຍຂອງຕົນ ແລະ ກໍ່ຈະເປັນວິສາຫະກິດຫລຸບທຶນ, ແລະກົງກັນຂ້າມ ວິສາຫະກິດໃດທີ່ມີລາຍຈ່າຍເທົ່າກັນກັບການໃຊ້ຈ່າຍອັນຈຳເປັນທາງສັງຄົມ ຫລື ຕຳ່ກວ່ານັ້ນອີກ ກໍ່ຈະເປັນວິສາຫະກິດທີ່ມີຜົນກຳໄລ. ຫລັກບ່ອນອີງຂອງລັດສັງຄົມນິຍົມໃນພາກການເຄື່ອນໄຫວເສດຖະກິດ ຢ່າງມີແຜນການຂອງຕົນ ແມ່ນບັນຫາຄວາມຈຳເປັນ ໃນການຮັບປະກັນໃຫ້ວິສາຫະກິດທັງຫມົດ ແລະ ທັງຫມົດຂະແຫນງ-

ການຕ່າງໆ ມີຜົນກຳໄລ.

ການມີຜົນກຳໄລສະແດງເຖິງ ລະດັບກຳໄລແບບທຽບຖ່ານ. ອາດ ຈະມີ ການຄິດໄລ່ດ້ວຍສູ່ວິທີ. ອັນທີໜຶ່ງ, ອາດຈະມີການຄິດໄລ່ເປັນກຳໄລໂດຍ ຫານໃສ່ ການໃຊ້ຈ່າຍ ຂອງວິສາຫະກິດ (ຕົ້ນທຶນການຜະລິດ):

$$\text{ມຜ} = \frac{\text{ບກ}}{\text{ຕ}}$$

ມຜ - ມາດຕະຖານ ຜົນກຳໄລ,

ບກ - ບໍລິມາດກຳໄລ,

ຕ - ຕົ້ນທຶນການຜະລິດ.

ໃນປະຈຸບັນນີ້ ວິທີການຄິດໄລ່ ການມີຜົນກຳໄລອັນນີ້ຖືກຈຳກັດ ເພາະວ່າ ມັນບໍ່ສະແດງອອກໃຫ້ໄດ້ໝົດປະສິດທິພາບ ໃນການເຄື່ອນໄຫວ ເສດຖະກິດ-ຂອງວິສາຫະກິດ.ຢູ່ໃນວິທີການອັນນີ້ ເກືອບວ່າບໍ່ມີການສອງແສງໃຫ້ເຫັນການ ນຳໃຊ້ທຶນພື້ນຖານແຫ່ງການຜະລິດ. ວິທີການນີ້ແມ່ນໃຊ້ກັນ ເພື່ອກຳນົດການມີ ຜົນກຳໄລ ຂອງຜະລິດຕະພັນບາງຊະນິດສະເພາະ ແລະ ໃນເວລາ ຈັ້ນແຜນ ການວາງລາຄາ ຂອງຜະລິດຕະພັນ.

ອັນທີສອງ, ການມີຜົນກຳໄລແມ່ນ ມີການກຳນົດ ເປັນກຳໄລຫານໃສ່ມູນ ຄ່າທຶນພື້ນຖານແຫ່ງການຜະລິດ ແລະ ພາຫະນະຫມຸນວຽນ ຕາມກຳນົດໝາຍ ຂອງວິສາຫະກິດ. ມັນມີການຄິດໄລ່ ຕາມຕຳລາດັ່ງລຸ່ມນີ້:

$$\text{ມຜ} = \frac{\text{ບກ}}{\text{ທ}}$$

ຊຶ່ງໃນນີ້: ມຜ - ກຳນົດໝາຍການມີຜົນກຳໄລ,

ບກ - ຂະໜາດກຳໄລ,

ທ - ລຸນຄ່າທຶນການຜະລິດ ແລະ ພາຫະນະ ຫມຸນ-ວຽນ ຕາມກຳນົດໝາຍ.

ຕົວເລກກຳນົດໝາຍການມີຜົນກຳໄລອັນນີ້ ກ່ອນອື່ນໝົດແມ່ນ ສະແດງ ເຖິງລະດັບການນຳໃຊ້ທຶນການຜະລິດ ຂອງວິສາຫະກິດ ຢ່າງມີປະສິດທິຜົນ.

ສົມມຸດວ່າ ວິສາຫະກິດສອງແຫ່ງ ມີພື້ນຖານ ແຫ່ງການຜະລິດ ຜູ ລະ ໓໐ ລ້ານຮູບເທົ່ານັ້ນ. ແຕ່ໃນໄລຍະໜຶ່ງປີ ວິສາຫະກິດແຫ່ງໜຶ່ງໄດ້ມີກຳໄລ ໑໐ ລ້ານຮູບ ແລະ ວິສາຫະກິດອີກແຫ່ງໜຶ່ງ ພັດໄດ້ມີກຳໄລ ໑໘ ລ້ານຮູບ. ລະດັບການມີຜົນກຳໄລ ຂອງວິສາຫະກິດແຫ່ງທຳອິດເທົ່າກັນກັບ:

$$\left(\frac{๑๐}{๓๘} \times ๑๐๐\right) = ๓๓,๓\ \%$$

ແລະ ຂອງວິສາຫະກິດແຫ່ງທີ່ສອງ:

$$\left(\frac{๑๔}{๓๐} \times ๑๐๐\right) = ๔๐\ \%$$

ສະຫລຸບຄວາມວ່າ ວິສາຫະກິດແຫ່ງທີ່ສອງ ໄດ້ນຳໃຊ້ທຶນຜັນຖານຂອງຕົນ ຢ່າງມີປະສິດທິຜົນຫລາຍກວ່າ.

ລະບຽບການຄິດໄລ່ລະດັບມີຜົນກຳໄລຄືແນວນີ້ ເປັນເງື່ອນໄຂເຮັດໃຫ້ - ໜ່ວຍງານ ຢູ່ວິສາຫະກິດຕ່າງໆ ມີຄວາມສົນໃຈເພີ່ມຂຶ້ນຕື່ມ ໃນການປັບ ປຸງ ການນຳໃຊ້ທຶນຜັນຖານແຫ່ງການຜະລິດໃຫ້ໄດ້ດີກວ່າເກົ່າ ແລະ ໃນການຫລຸດ ຜ່ອນການໃຊ້ຈ່າຍແຮງງານ"ເປັນ"ແລະແຮງງານເປັນວັດຖຸ.

ລະດັບມີຜົນກຳໄລຂອງວິສາຫະກິດ ຍັນນຳຫລາຍສາຍເຫດ. ອັນທີໜຶ່ງກໍ ແມ່ນຍັນນຳປັດໄຈໜຶດໜຸກອັນ ທີ່ມີຜົນສະທ້ອນຕໍ່ ຕົ້ນທຶນການຜະລິດ; ອັນ ທີ ສອງ ກໍແມ່ນຍັນນຳອັດຕາສ່ວນເຄື່ອງຈັກ, ແມ່ຈັກ, ອຸປະກອນທີ່ດຳເນີນການ ຜະລິດອັນລວມ; ອັນທີສາມ ກໍແມ່ນຍັນນຳລາຄາຜະລິດຕະພັນ ທີ່ເຮັດອອກມາ ໄດ້, ຍັນນຳຄຸນນະພາບຂອງສິນຄ້າ ແລະ ເງື່ອນໄຂໃນການສະໜອງ ແລະ ຈຳໜ່າຍຂາຍອອກ ແລະ ອື່ນໆ.

ພາຍໃຕ້ລະບອບສັງຄົມນິຍົມ ການຍົກລະດັບມີຜົນກຳໄລ ຂອງວິສາຫະກິດ ຈຳນວນໜຶ່ງຍັນ ບໍ່ມີການຂັດກັນ ກັບສິດຜົນປະໂຫຍດ ຂອງວິສາຫະກິດອື່ນໆ, ແຕ່ກົງກັນຂ້າມ ກັບ ສ້າງເງື່ອນໄຂເພື່ອພັດທະນາເສດຖະກິດແຫ່ງຊາດ ທັງ ໝົດຢ່າງເລິ່ງລັດ ໃນໄລຍະຍາວນານ. ການມີຜົນກຳໄລ ຂອງວິສາຫະ ກິດ ສັງຄົມນິຍົມ ບໍ່ຖືກໄດ້ຮັບຄວາມກະທົບກະເທືອນ ຈາກສະພາບລາຄາທີ່ ການ ປ່ຽນແປງ ແບບຕາມມີຕາມເກີດ ແລະ ແບບບັງເອີນ. ການດຳເນີນເສດຖະ ກິດແບບມີແຜນການ ຮັບປະກັນໃຫ້ມີການຈຳໜ່າຍ ຜະລິດຕະພັນອອກ ໃນລາ ຄາຄົງຕົວຕາມແຜນການ.

ລະບົບລາຄາ ຜະລິດຕະພັນຂອງຊຸດສາຫະກຳສັງຄົມນິຍົມ ມີການຈຳໜ່າຍ ອອກຕາມລາຄາໃນແຜນການທີ່ໄດ້ວາງໄວ້ກ່ອນແລ້ວ. ພາຍ ໃຕ້ລະບອບສັງຄົມນິຍົມຫຼັກການພື້ນຖານໃນການວາງລາຄາຄືການວາງລາຄາ ຢ່າງມີແຜນການໂດຍຄຳນຶງເຖິງການໃຊ້ຈ່າຍເຂົ້າໃນການຜະລິດຂອງສັງຄົມ

ຫມາຍຄວາມວ່າ ບົນພື້ນຖານຄຸນຄ່າຂອງສິນຄ້າ. ຢູ່ໃນສັງຄົມນິຍົມ ລາຄາມີ-ການຜິດດ່ຽງກັນ ກັບຄຸນຄ່າ ແຕ່ການຜິດດ່ຽງດັ່ງກ່າວມີຂໍ້ນ ແບບບໍ່ແມ່ນຕາມມີ ຕາມເກີດ ແຕ່ຫາກແມ່ນລັດ ທີ່ເປັນຜູ້ກຳນົດມັນອອກມາ ເພື່ອຮັບໃຊ້ການ ພັດ ທະນາເສດຖະກິດແຫ່ງຊາດ. ໂຄງການຂອງ ພ.ກ.ສ.ຊ ໄດ້ບົ່ງໄວ້ ວ່າ " ລາຄາຈະຕ້ອງສ່ອງແສງຢູ່ໃນລະດັບສູງກວ່າເກົ່າ ເຖິງການໃຊ້ຈ່າຍແຮງ-ງານອັນຈຳເປັນ, ຈະຕ້ອງຮັບປະກັນຫລາຍກວ່າເກົ່າ ໃຫ້ມີການທົດແທນ ຄືນ ການໃຊ້ຈ່າຍ ໃນການຜະລິດ ແລະ ໃນການຈຳລະຈອນ ແລະ ໃຫ້ມີວິສາ ຫະ ກິດ ທີ່ເຄື່ອນໄຫວວຽກງານຢ່າງປົກກະຕິດີ ມີກຳໄລໃນລະດັບອັນແມ່ນອນ ".

ຢູ່ໃນສັງຄົມ ສັງຄົມນິຍົມ ເພີ່ນຈຳແນກອອກເປັນລາຄາຂາຍຍົກ ຂອງ ວິ ສາຫະກິດ ແລະ ຂອງອຸດສາຫະກຳ, ເປັນລາຄາເອກະພາບ ໃນການເກັບຊື້ ຜະລິດຕະພັນກະສິກຳ, ເປັນລາຄາຂາຍຍ່ອຍ ຢູ່ໃນສາຍການຄ້າຂອງລັດແລະ ຂອງລວມຫມູ່, ເປັນລາຄາຂາຍຍ່ອຍ ຂອງຕະຫລາດທີ່ບໍ່ມີການຈັດຕັ້ງ.

ຢູ່ ສ.ສ.ສ.ຊ ລາຄາຂາຍຍົກ ປະກອບມີຕົ້ນທຶນການຜະລິດອັນຄົບຖ້ວນ ມີກຳໄລຂອງວິສາຫະກິດອຸດສາຫະກຳ ແລະ ມີການໃຊ້ຈ່າຍ ແລະ ມີກຳໄລ ຂອງອົງການຈັດຕັ້ງ ທີ່ເຮັດວຽກຈຳຫນ່າຍອອກ. ຖ້າຫາກວ່າມີການເກັບ ອາ ກອນຕົວເລກຈາກສິນຄ້າຊະນິດນີ້ ດັ່ງນັ້ນເຂົ້າຢູ່ໃນລາຄາຂາຍຍົກກໍ່ຍັງມີ ອາ ກອນຕົວເລກອີກ.

ອາດຈະສະແດງໃຫ້ເຫັນການພົວພັນ ຊຶ່ງກັນແລະກັນ ຂອງລາຄາປະເພດ ຕ່າງໆ ທີ່ມີຕໍ່ຜະລິດຕະພັນອຸດສາຫະກຳ ດ້ວຍຕາຕະລາງດັ່ງລຸ່ມນີ້:

ຕົ້ນທຶນການ ຜະລິດສິນຄ້າ	ກຳໄລ	ອາກອນ ຕົວເລກ	ອັດຕາຄິດໄລ່ ເພີ່ມຄ່າຈຳ ຫນ່າຍອອກ	ອັດຕາ ເພີ່ມຂອງ ການຄ້າ
ລາຄາຂາຍຍົກຂອງວິສາຫະກິດ				
ລາຄາຂາຍຍົກຂອງອຸດສາຫະກຳ				
ລາຄາຂາຍຍ່ອຍ				

ອາກອນຕົວເລກ ທີ່ໂອນເຂົ້າງົບປະມານສ່ວນຫລາຍແມ່ນ ມາຈາກ ຂະ-ແຫນງການທີ່ດຳເນີນການຜະລິດ ເຄື່ອງໃຊ້ສອຍສ່ວນຕົວ ກໍ່ຄືມາຈາກ ຂະ ແຫນງການອຸດສາຫະກຳຫນັກຈຳນວນຫນຶ່ງ (ຂະແຫນງການອຸດສາຫະກຳ -

ເຊ່ອເພິ່ງ, ຂະແໜງການອຸດສາຫະກຳອາຍແກັດທຳມະຊາດ, ຂະ ແໜງ ການອຸດສາຫະກຳຫລອມໂລຫະ, ຂະແໜງການອຸດສາຫະກຳຜະລິດເຄື່ອງ - ຕັກນິກໄຟຟ້າ ແລະ ອື່ນໆ). ຜະລິດຕະພັນອຸດສາຫະກຳໜັກຫລາຍໆອັນ ມີການຈຳໜ່າຍອອກ ໃນລາຄາຕ່ຳກວ່າຄຸນຄ່າ. ສິ່ງດັ່ງກ່າວໝາຍເຖິງວ່າ- ໂດຍຜ່ານອາກອນຕົວເລກ ພາກສ່ວນໜຶ່ງຂອງລາຍຮັບສິດ ທີ່ສ້າງຂຶ້ນຢູ່ໃນຂະ ແໜງການອຸດສາຫະກຳໜັກນັ້ນ ມີການສະເລ່ຍເຂົ້າຢູ່ໃນລາຄາສິນຄ້າ ທີ່ຜະ ລິດອອກມາຢູ່ໃນຂະແໜງການອຸດສາຫະກຳເບົາ.

ບ່ອນອີງຂອງລັດ ໃນເວລາວາງລາຄາຂາຍຍົກ ແມ່ນຄວາມຈຳເປັນທີ່ຈະ ຕ້ອງມີການຫົດແໜມຄືນ ລາຍຈ່າຍຕາມແຜນການຂອງວິສາຫະກິດ ເຂົ້າ ໃນ ການຜະລິດ ແລະ ມີການຮັບປະກັນໃຫ້ວິສາຫະກິດມີລາຍຮັບ (ມີຜົນກຳໄລ).

ດ້ວຍລະບົບລາຄາ ລັດມີການປັບປຸງຫລັກການເຄື່ອນໄຫວເສດຖະກິດແບບ ຄຸມຄ່ຽງ ແລະ ມີຜົນກຳໄລ, ມີການຊຸກຍູ້ໃຫ້ຫລຸດຜ່ອນການສົ້ມເປືອງໃນການ ຜະລິດ ແລະ ໃຫ້ເພີ່ມທະວີການຜະລິດສິນຄ້າທີ່ຈຳເປັນ.

๔. ການເຄື່ອນໄຫວເສດຖະກິດແບບຄຸມຄ່ຽງ ແລະ ມີຜົນກຳໄລ ຢູ່ນາລອມ

ໃນດ້ານພື້ນຖານແລ້ວ ບັນດາຫລັກການກ່ຽວກັບການເຄື່ອນໄຫວເສດ ຖະ ກິດແບບຄຸມຄ່ຽງແລະມີຜົນກຳໄລດັ່ງກ່າວຂ້າງເທິງນີ້ແມ່ນໃຊ້ໄດ້ທັ່ງສຳລັບນາ ລອມ. ແຕ່ພ້ອມກັນນັ້ນ ການເຄື່ອນໄຫວເສດຖະກິດ ແບບຄຸມຄ່ຽງ ແລະ ມີຜົນ ກຳໄລຢູ່ນາລອມ ແມ່ນເປັນໄປໃນຮູບການທີ່ຕ່າງກັນ ກັບຢູ່ໃນວິສາຫະກິດ ທັ່ງ ນີ້ຍ້ອນຈຸດພິເສດກ່ຽວກັບຮູບການກຳມະສິດ ແບບສະຫະກອນ-ນາລອມ ແລະ ປັດໄຈທຳມະຊາດຂອງການຜະລິດ.

ການເຄື່ອນໄຫວເສດຖະກິດແບບຄຸມຄ່ຽງ ແລະ ມີຜົນກຳໄລ ກ່ອນອື່ນ - ໝົດແມ່ນຮຽກຮ້ອງໃຫ້ມີການຄິດໄລ່ ຜະລິດຕະພັນລວມຍອດຂອງນາລອມແມ່ນ ທັ່ງໝົດຜະລິດຕະພັນ ທີ່ຮັດອອກມາໄດ້ ໃນໄລຍະໜຶ່ງປີ ຢູ່ໃນການຜະລິດ- ຂອງສ່ວນລວມສະຫະກອນ. ມີການຂາຍພາກສ່ວນໃຫຍ່ຂອງຜະລິດຕະພັນ ດັ່ງ ກ່າວ ທີ່ແມ່ນຜະລິດຕະພັນສິນຄ້າຂອງນາລອມ. ມີການຂາຍພາກສ່ວນຕ່ຳ -

ຂອງຜະລິດຕະພັນເປັນສິນຄ້າໃຫ້ລັດ ໂດຍສອດຄ່ອງກັບແຜນການກ່ຽວກັບລາ-ຄາພື້ນຖານໃນການເກັບຊື້ ທີ່ມີການວາງໄວ້ສໍາລັບຫລາຍປີ. ໃນນີ້ເພື່ອຈູດປະສົງຊຸກຍູ້ ໃຫ້ມີການປະຕິບັດແຜນການແຫ່ງລັດກ່ຽວກັບຜະລິດຕະພັນ ຈໍານວນ-ໜຶ່ງ ໃຫ້ໄດ້ລຸ່ມລະດັບຄາດໝາຍນັ້ນ ໄດ້ມີການວາງອັດຕາຄິດໄລ່ ເພີ່ມເຕີ່ມ ຫ50 ສ່ວນຮ້ອຍຕໍ່ລາຄາພື້ນຖານໃນການເກັບຊື້ຜະລິດຕະພັນ ທີ່ຂາຍອອກ ເກີນ ຄາດໝາຍຂອງແຜນການ.

ຢູ່ ສ.ສ.ສ.ຢ ມີການວາງລາຄາເກັບຊື້ຂອງລັດ ສໍາລັບເຂື່ອງສະບຽງ ແຕ່ລະຊະນິດຢູ່ຕາມເຂດຕ່າງໆ ອີງຕາມເງື່ອນໄຂຂອງການຜະລິດ ຢູ່ໃນເຂດ ດົ່ງກ່າວ. ຍົກຕົວຢ່າງ ລາຄາເກັບຊື້ພືດພັນທັນຍາຫານຢູ່ໃນເຂດ ອູຣານ ສູງ ກວ່າຢູ່ ອູກລາອິນາ ຍ້ອນວ່າ ເງື່ອນໄຂດ້ານດິນຟ້າອາກາດ ແລະ ເງື່ອນໄຂ ອື່ນໆ ຢູ່ອູກລາອິນາ ມີຄວາມສະດວກຫລາຍກວ່າ ເພື່ອດໍາເນີນການຜະລິດກະ ສິກໍາ ແລະ ການໃຊ້ຈ່າຍໃນການຜະລິດພືດພັນທັນຍາຫານ ๑๐๐ ກິໂລ ກໍ່ຕໍ່ ກວ່າ.

ເພື່ອຢາກຮູ້ວ່າ ການຜະລິດຢູ່ນາລວມ ມີຜົນກໍາໄລຫລື ບໍ່ ມັນມີຄວາມ ຈໍາ ເປັນ ທີ່ຈະຕ້ອງຄິດໄລ່ຫາຕົ້ນທຶນການຜະລິດ. ຕົ້ນທຶນການຜະລິດຢູ່ນາລວມ - ແມ່ນພາກສ່ວນໜຶ່ງຂອງຈຸນຄ່າຄິດໄລ່ອອກມາເປັນເງິນ, ເພື່ອເປັນການ ຫັດ ແທນຄືນການໃຊ້ຈ່າຍສໍາລັບພາຫະນະການຜະລິດທີ່ໄດ້ມີການຊົມໃຊ້ໄປແລ້ວນັ້ນ (ແຮງງານເປັນວັດຖຸ) ແລະ ຄ່າແຮງງານຂອງຊາວນາລວມ (ພາກສ່ວນ ໜຶ່ງຂອງແຮງງານ"ເປັນ"). ຕົ້ນທຶນການຜະລິດ ສະແດງອອກໃຫ້ເຫັນວ່າ ການຜະລິດ ແລະ ການຈໍາໜ່າຍຜະລິດຕະພັນຊະນິດນັ້ນ ຫລືຊະນິດນີ້ ຄິດໄລ ເປັນເທົ່າໃດແທ້.

ຕົ້ນທຶນການຜະລິດຂອງນາລວມ ປະກອບດ້ວຍ ການໃຊ້ຈ່າຍ ພາກ ສ່ວນ ຕ່າງໆດັ່ງລຸ່ມນີ້: ຈຸນຄ່າທຶນພື້ນຖານ ທີ່ໄດ້ມີການຊົມໃຊ້ໄປແລ້ວໃນການຜະລິດ (ເງິນຄ່າຫລ້ຽຫ້ຽນ), ຈຸນຄ່າຜະລິດຕະພັນ ແລະ ພັດສະດຸ ທີ່ໄດ້ໃຊ້ຈ່າຍ-ໄປແລ້ວ (ປະເພດຜະລິດຊົມມາເອົາເອງ ຫລື ປະເພດຊື້ຂາມາ) ການ ເບີກຈ່າຍຄ່າແຮງງານ, ການໃຊ້ຈ່າຍເປັນເງິນລາຍການອື່ນໆ (ການ ຈ່າຍ ຄ່າໄປຮັດວຽກງານຢູ່ທ່າງອື່ນ ແລະ ອື່ນໆ).

ຕົ້ນທຶນການຜະລິດຢູ່ນາລວມ ແມ່ນຄິດໄລ່ຄືແນວນີ້: ແນວປູກ, ອາ ຫານ

ສັດ ແລະ ພັດສະດຸອື່ນໆ ທີ່ຜະລິດຂຶ້ນຢູ່ພາຍໃນ ແມ່ນມີການຕີລາຄາ ຕາມຕົ້ນທຶນການຜະລິດຂອງມັນ, ສ່ວນພັດສະດຸທີ່ຊຸເຂົ້າມາ ແມ່ນມີການຕີລາຄາ ຕາມລາຄາຕົວຈິງ. ມີການຄິດໄລ່ການຫລຸ້ຍຫ້ຽນຂອງທຶນພື້ນຖານແຫ່ງການຜະລິດ, (ລົດໄຖນາ, ລົດໂອໂຕ, ເຄື່ອງຈັກກະເສດ ແລະ ອື່ນໆ) ຕາມກຳນົດ - ໝາຍ ທີ່ໄດ້ຮັບການເຫັນດີ ຈາກນິຕິກະເສດຂອງລັດ. ຍັງມີການຄິດໄລ່ອັດຕາເບີກຈ່າຍ ຄ່າແຮງງານເປັນວັດຖຸ ໃຫ້ຊາວນາລວມມາເປັນເງິນ. ການເບີກຈ່າຍຄ່າແຮງງານເປັນເງິນ ເປັນຂໍ້ສະດວກເພື່ອນຳໃຊ້ວິທີການເຄື່ອນ - ໄຫວເສດຖະກິດ ແບບຄຸມຄຽງ ແລະ ມີຜົນກຳໄລ.

ນາລວມແມ່ນຫົວໜ່ວຍການຜະລິດອັນໃຫຍ່ໂຕ. ເພື່ອຊຸ້ນຳນາລວມ ມີຄວາມຈຳເປັນທີ່ຈະຕ້ອງມີການກວດກາ ລາຍຈ່າຍເປັນເງິນທັງໝົດເຂົ້າໃນ-ການຜະລິດຢ່າງເຂັ້ມງວດ. ສະຫະກອນພວມຮັດໜ້າທີ່ຫລຸດຜ່ອນຕົ້ນທຶນການຜະລິດລົງໃນຂັ້ນຕ່ຳໄປ. ຢາກຮັດອັນນີ້ໄດ້ ກ່ອນອື່ນໝົດຕ້ອງຍົກສູງສະມັດຖະພາບ ຂອງການອອກແຮງງານຂຶ້ນ, ເງື່ອນໄຂຕົ້ນຕໍເພື່ອຮັດໃຫ້ສະມັດຖະ - ພາບ ຂອງການອອກແຮງງານ ມີການຕີບໃຫຍ່ຂະຫຍາຍຕົວ ແມ່ນບັນຫາ ການຮັດກະເສດສຸມ ທີ່ພົວພັນກັບ ການປະກອບວັດຖຸ ເຄມີ ເຂົ້າຮັບໃຊ້ການ ກະສິກຳ, ການເສີມຂະຫຍາຍການປູກຝັງ ແບບມີຊຸມລະປະທານ, ການ ນຳໃຊ້ເຄື່ອງກົນຈັກຢ່າງຄົບຊຸດເຂົ້າໃນຕົວຈິງ ແລະ ການຕິດຕັ້ງໄຟຟ້າ. ການເສີມຂະຫຍາຍການຮັດກະເສດສຸມ ຈະຊ່ວຍໃຫ້ສາມາດຍົກລະດັບ ສະມັດຖະ ພາບຂອງທົ່ງນາ ແລະ ສະມັດຖະພາບ ຂອງການລ້ຽງສັດອັນຢ່າງຫລວງຫລາຍ.

ການເພີ່ມທະວີການຜະລິດ ແລະ ການຫລຸດຜ່ອນຕົ້ນທຶນການຜະລິດ ຂອງ ນາລວມ ແມ່ນເງື່ອນໄຂອັນຈຳເປັນ ເພື່ອຫລຸດຜ່ອນລາຄາເກັບຊື້ ແລະລາຄາ ຂາຍຍ່ອຍຂອງລັດ ທີ່ວາງໄວ້ສຳລັບຜະລິດຕະພັນກະເສດ. ມັນມີການວາງລາ ຄາເກັບຊື້ຂອງລັດ ເພື່ອຮັດແນວໃດ ໃນເວລາຂາຍຜະລິດຕະພັນໃຫ້ລັດ ນັ້ນ ໃຫ້ນາລວມສາມາດກຸ້ມຄ່າໃຊ້ຈ່າຍຂອງຕົນໄດ້ ແລະ ມີລາຍຮັບສົດ (ກຳໄລ) ເປັນອັດຕາຫລຸດລົ້ນກັນ ລະຫວ່າງມູນຄ່າທີ່ໄດ້ຮັບມາຈາກການຂາຍເຄື່ອງ ກັບ ຕົ້ນທຶນການຜະລິດອັນຕົ້ນສ່ວນ.

<u>ລາຍໄດ້ສົດຂອງນາລວມ</u> ແມ່ນພາກສ່ວນໜຶ່ງຂອງມູນຄ່າຜະລິດຕະ ພັນ ລວມຍອດທີ່ຍັງເຫລືອຢູ່ ຫລັງຈາກໄດ້ຫັກເອົາລາຍຈ່າຍທັງໝົດທີ່ໃຊ້ເຂົ້າ ໃນ

ການຜະລິດມັນອອກ ໝາຍຄວາມວ່າ ຫລັງຈາກໄດ້ຫັກເອົາຕົ້ນທຶນການຜະລິດ ອອກ. ການສົມທຽບກັນ ລະຫວ່າງລາຍຈ່າຍ ກັບ ລາຍຮັບເປັນເງື່ອນໄຂໃຫ້ ສາມາດກຳນົດຜົນໄດ້ທາງດ້ານເສດຖະກິດໃນການຜະລິດ ຜະລິດຕະພັນກະ - ສິກຳຊະນິດນັ້ນ ຫລື ຊະນິດໃດ້ແລະ ກຳນົດໝາກຜົນຂອງທັງໝົດການເຄື່ອນ-ໄຫວເສດຖະກິດຂອງນາລອມ.

ພາກສ່ວນໜຶ່ງ ຂອງລາຍໄດ້ສຶດ ຂອງນາລອມແມ່ນ <u>ເບ້ຍປອກລອກ.</u>

ບັນດານາລອມ ທີ່ດຳເນີນການຜະລິດຢູ່ຕ່ອມດິນລະດັບດີເລີດ ຫລື ລະດັບ ຜ່ານກາງໃນດ້ານຄຸນນະພາບ ຫລືວ່ານາລອມບ່ອນໃດທີ່ຕ່ຳຢູ່ມໍ່ກວ່າໝູ ກັບສະ ຖານທີ່ຈຳໜ່າຍຜະລິດຕະພັນ ຂອງຕົນ ແລະ ແບກຫາບລາຍຈ່າຍ ຄ່າຂົນສົ່ງ ໜ້ອຍກວ່າໝູ່ນັ້ນ ແມ່ນມີລາຍໄດ້ສຶດເພີ່ມເຕີມ ຖ້າສົມທຽບໃສ່ບັນດານາລອມ ທີ່ເຄື່ອນໄຫວອຽກງານຢູ່ ໃນເງື່ອນໄຂການຜະລິດທີ່ຕ່ຳກວ່າ ທາງດ້ານທຳມະ ຊາດ ດິນຟ້າອາກາດ ແລະ ອື່ນໆ. ພາກສ່ວນນີ້ຂອງລາຍໄດ້ສຶດ ປະກອບ-ເປັນ ເບ້ຍປອກລອກທີໜຶ່ງ.

ແຕ່ຢູ່ໃນນາລອມກໍ່ຍັງປະກອບມີ ເບ້ຍປອກລອກທີສອງອີກ. ມັນແມ່ນພາກ ສ່ວນລາຍໄດ້ສຶດ ທີ່ບັນດານາລອມທີ່ກ້າວໜ້າໄດ້ຮັບ ພາຍຫລັງທີ່ໄດ້ ມີການ ນຳໃຊ້ດິນດອນໃຫ້ໄດ້ດີກວ່າເກົ່າ, ມີການນຳໃຊ້ເຕັກນິກໃໝ່ ແລະ ເຄື່ອງ-ຈັກເຂົ້າໃນຕົວຈິງ, ມີການນຳໃຊ້ຝຸ່ນວິທະຍາສາດ, ມີການຍົກລະດັບການປູກ ຝັງຂຶ້ນ ແລະ ອື່ນໆ. ສິ່ງດັ່ງກ່າວພາໄປເຖິງບ່ອນ ມີການເພີ່ມທະວີສະມັດຖະ ພາບຂອງການອອກແຮງງານຂຶ້ນ ແລະ ມີການຫລຸດຜ່ອນຄ່າໃຊ້ຈ່າຍເຂົ້າ ໃນ ການຜະລິດ ຫົວໜ່ວຍຜະລິດຕະພັນ.

ພາກສ່ວນໜຶ່ງຂອງເບ້ຍປອກລອກ ແມ່ນປະໄວ້ຢູ່ໃນນາລອມ. ອີກ ພາກ ສ່ວນໜຶ່ງ ແມ່ນໂອນເຂົ້າງົບປະມານແຫ່ງລັດ ໂດຍຜ່ານລະບົບລາຄາ ແລະ ອາກອນລາຍໄດ້.

ບັນດານາລອມ ມີຄວາມອາດສາມາດຍົ່ມຍ້ອນຢ່າງຫລວງຫລາຍເພື່ອຫລຸດ ຜ່ອນຄ່າໃຊ້ຈ່າຍເຂົ້າໃນການຜະລິດຫົວໜ່ວຍຜະລິດຕະພັນ. ການຫລຸດຜ່ອນ-ຄ່າໃຊ້ຈ່າຍເຂົ້າໃນການຜະລິດ ຫົວໜ່ວຍຜະລິດຕະພັນດ້ວຍວິທີການເພີ່ມທະວີ ສະມັດຖະພາບ ຂອງການອອກແຮງງານຂຶ້ນນັ້ນ ພາໄປເຖິງບ່ອນມີການຫລຸດ-ຜ່ອນຕົ້ນທຶນການຜະລິດ ແລະ ມີການເພີ່ມທະວີ ລາຍໄດ້ສຶດ ຂອງນາລອມ ,

ມີການສືບຕໍ່ຍົກສູງລະດັບຄວາຢູ່ດີກິນດີ ຂອງຊາວນາລວມ.

ຄຳຖາມເພື່ອທວນຄືນ

๑. ຈົ່ງຈຳແນກລັກສະນະສະເພາະຂອງຕ່ອງໂສ້ ພົ້ນຖານຢູ່ ໃນການຜະລິດ ຂອງສັງຄົມ ໃນລະບອບສັງຄົມນິຍົມ ທີ່ມີການເຄື່ອນໄຫວ ແບບວຸນດ່ຽງ ແລະ ມີຜົນກຳໄລ.

๘. ທາດແທ້ເມື່ອໃນຂອງການເຄື່ອນໄຫວເສດຖະກິດ ແບບວຸນດ່ຽງແລະມີຜົນ ກຳໄລ ມີຫຍັງແດ່ ?

๙. ການຮັບປະກັນໃຫ້ມີການເຄື່ອນໄຫວ ເສດຖະກິດ ແບບດຸນດ່ຽງແລະມີຜົນ ກຳໄລ ແມ່ນຢູ່ບົນພົ້ນຖານຫລັກການອັນໃດແດ່ ?

๔. ການຮັບປະກັນຄືແນວໃດ ຈົ່ງຮັດໃຫ້ຊາວຜູ້ອອກແຮງງານແຕ່ລະຄົນແລະ ທັງໝົດໝ່ວຍງານ ຢູ່ວິສາຫະກິດ ມີຄວາມສົນໃຈທາງດ້ານວັດຖຸ ?

๕. ທາດແທ້ເມື່ອໃນ ຂອງລະບອບປະຢັດ ແລະ ຜົນສະທ້ອນຂອງມັນ ຕໍ່ການ ເຄື່ອນໄຫວເສດຖະກິດແບບວຸນດ່ຽງ ແລະ ມີຜົນກຳໄລ ມີຫຍັງແດ່ ?

๗. ມີຮູບການເຄື່ອນໄຫວເສດຖະກິດແບບວຸນດ່ຽງ ແລະ ມີຜົນກຳໄລອັນ ໃດ ແດ ?

๗. ຈົ່ງຈຳແນກ ລັກສະນະສະເພາະ ຂອງທຶນພົ້ນຖານແລະທຶນໝຸນວຽນ.

๘. ຈົ່ງຈຳແນກລັກສະນະສະເພາະຂອງພາຫະນະໝຸນວຽນ ແລະ ຮອບໝຸນ ວຽນຂອງມັນ.

๙. ວຸນຄ່າຜະລິດຕະພັນແລະ ຕົ້ນທຶນການຜະລິດ ຂອງວິສາຫະກິດສັງຄົມນິຍົມ ໂດຽປະກອບຕົ້ນທຶນການຜະລິດ ແລະ ວິທີການເພື່ອຫລຸດຜ່ອນມັນລົງ.

๑๐. ລາຍໄດ້ສົດແມ່ນຫຍັງ ? ມັນມີຮູບການໃດແດ່ ?

๑๑. ກຳໄລແມ່ນຫຍັງ? ມີການແບ່ງປັນຄືແນວໃດ ລະຫວ່າງລັດ ກັບ ວິ ສາ ຫະກິດ ?

๑๘. ການມີຜົນກຳໄລແມ່ນຫຍັງ ? ມີການຄິດໄລ່ແນວໃດ ?

๑๗. ລະບົບລາຄາຢູ່ໃນລະບອບສັງຄົມນິຍົມເປັນຄືແນວໃດ ?

๑๘. ຈຸດພິເສດຂອງການເຄື່ອນໄຫວເສດຖະກິດແບບວຸນດ່ຽງແລະ ມີຜົນກຳ-ໄລຢູ່ນາລວມມີຫຍັງແດ່ ?

ພາກ ສິບຫົກ

ການຜະລິດສຳ ແບບສັງຄົມນິຍົມ.
ລາຍໄດ້ແຫ່ງຊາດ ແລະລະບົບການເງິນ-ສິນເຊື່ອ

๑. ການຜະລິດສຳແບບສັງຄົມນິຍົມ

ທາດແທ້ເນື້ອໃນຂອງ ການສະລິດສຳ ແບບ ສັງຄົມນິຍົມ

ການຜະລິດສຳຂອງສັງຄົມ ແມ່ນການວັດ ແບບ ລຽນຕິດ ແລະ ແບບຊ້ຳໄປຊ້ຳມາຢ່າງເປັນປະຈຳ ແຫ່ງການຜະລິດ, ການແຈກຢາຍການແລກປ່ຽນ- ແລະການຊົມໃຊ້ຄວາມຮັ່ງມີທາງດ້ານວັດຖຸ. ຢູ່ໃນ ການວັດດັ່ງກ່າວ ມັນແມ່ນການສະລິດທີ່ບົດບາດຕັດສິນຊະຂາດ ເພາະວ່າ ມີ ສະເພາະແຕ່ສິ່ງໃດທີ່ສະລິດຂຶ້ນມາແລ້ວເທົ່ານັ້ນ ທີ່ອາດສາມາດແຈກຢາຍແລະ ຊົມໃຊ້ໄດ້.

ການຜະລິດສຳ ເຄີຍມີແບບເຊີງດ່ຽວ ແລະ ແບບເປີດກ້ວາງ. ພາຍໃຕ້ ລະບອບສັງຄົມນິຍົມ ມັນເກີດມີການເປີດກ້ວາງຂະໜາດການຜະລິດອອກຕື່ມ- ແຕ່ລະປີ ຢ່າງເປັນປະຈຳ ແລະ ຢ່າງລຽນຕິດ ໝາຍຄວາມວ່າມັນເກີດ ມີ ການຜະລິດສຳແບບເປີດກ້ວາງ. ການວັດແຫ່ງການຜະລິດສຳ ໝາຍເຖິງບໍ່ ສະເພາະພຽງແຕ່ການຜະລິດສຳ ຄວາມຮັ່ງມີທາງດ້ານວັດຖຸ ແລະ ການ ຜະ

ລິດສຳແຮງງານເທົ່ານັ້ນ ແຕ່ຍັງໝາຍເຖິງການຜະລິດສຳ ການພົວພັນແຫ່ງ ການຜະລິດອີກ.

ການຜະລິດສຳ ການພົວພັນແຫ່ງການຜະລິດ ແບບສັງຄົມນິຍົມ ໝາຍ - ເຖິງການເຕີບໃຫຍ່ຂະຫຍາຍຕົວ ແລະ ການປັບປຸງກຳມະສິດສ່ວນລວມ ແບບ ສັງຄົມນິຍົມ ໃນສອງຮູບການຂອງມັນຄື ຮູບການກຳມະສິດຂອງລັດ (ຂອງທົ່ວ ປວງຊົນ) ແລະ ຮູບການກຳມະສິດຂອງນາລວມ-ສະຫະກອນ. ການຜະລິດ ສຳໝາຍເຖິງການໜັບເຂົ້າໃກ້ກັນ ແລະ ໃນອະນາຄົດ ກໍໝາຍ ເຖິງທັງ ການເຊື່ອມເຂົ້າກັນ ຂອງສອງຮູບການກຳມະສິດດັ່ງກ່າວ, ການຫັນປ່ຽນ ທັງ ສອງຮູບການກຳມະສິດນັ້ ໄປເປັນກຳມະສິດ ແບບກອມມູນິດ ແລະ ແບບ ເອ ກະພາບ ຂອງທົ່ວປວງຊົນກ່ຽວກັບພາຫະນະການຜະລິດ, ການເປີດກວ້າງແລະ ການປັບປຸງການຮ່ວມມືຖ່ານສະໜາຍ ແລະ ຊ່ວຍເຫລືອຊຶ່ງກັນແລະກັນ ລະ ຫວ່າງຊາວຜູ້ອອກແຮງງານ, ການເສີມຂະຫຍາຍທ່າທີແບບກອມມູນິດ ຕໍ່ການ ອອກແຮງງານ, ການເສີມຂະຫຍາຍບັນດາຮູບການແຈກຢາຍຄວາມຮັ່ງມີແລະ ວັດຖຸລ້ຽງຊີບ ແບບກອມມູນິດຢ່າງເປັນປະຈຳ.

ຈຸດພິເສດອັນຕົ້ນຕໍ ຂອງການຜະລິດສຳ ແບບສັງຄົມນິຍົມ ທີ່ແຕກຕ່າງກັນ ກັບຂອງທຶນນິຍົມ ແມ່ນຢູ່ບ່ອນວ່າ ມັນຮັບໃຊ້ເປົ້າໝາຍອັນສູງສົ່ງຄື-ການຕອບ ສະໜອງຄວາມຮຽກຮ້ອງຕ້ອງການຂອງປະຊາຊົນ. ພາຍໃຕ້ລະບອບທຶນນິຍົມ ເປົ້າໝາຍແມ່ນແຕກຕ່າງກັນ, ມັນແມ່ນການເພີ່ມຮັ່ງຄຸມມີຂອງພວກເຈົ້າ-ຂອງກຳມະສິດສ່ວນຕົວ ທີ່ເປັນຄົນຈຳນວນນ້ອຍ. ການຜະລິດສຳແບບສັງຄົມນິ ຍົມຂະຫຍາຍຕົວ ເພື່ອສິດເພີ່ມປະໂຫຍດ ຂອງທັງໝົດສັງຄົມ. ອັນນີ້ມັນສະກັດ ກັ້ນບໍ່ໃຫ້ມີຄວາມອາດສາມາດ ເກີດມີວິກິດການ ການຜະລິດລົ້ນຕະຫລາດແລະ ເກີດມີໄພຫວ່າງງານ.

ລັກສະນະສະເພາະອັນດັ່ນ ຂອງການຜະລິດແບບສັງຄົມນິຍົມແມ່ນຢູ່ບ່ອນ ວ່າ ການຜະລິດມີການເຕີບໃຫຍ່ຂະຫຍາຍຕົວຢ່າງລຽນຕິດ. ການຜະລິດ ສຳ ແບບສັງຄົມນິຍົມແມ່ນດຳເນີນໄປຢ່າງມີແຜນການ. ອັນນີ້ໝາຍຄວາມວ່າການ ຂະຫຍາຍຕົວ ຂອງຂະແໜງການອັນໃດກໍຕາມ ກໍຄືຂອງທັງໝົດການຜະລິດ-ຂອງສັງຄົມ ແມ່ນດຳເນີນໄປຕາມແຜນການ ທີ່ໄດ້ວາງໄວ້ລ່ວງໜ້າແລ້ວຜ່ານ ການຜະລິດສຳ ແບບສັງຄົມນິຍົມ ກຳລັງການຜະລິດເຕີບໃຫຍ່ຂະຫຍາຍຕົວ -

ຢ່າງ ລຽນຕິດ.

ຖ້າເບິ່ງບັນຫາ ໂດຍຢືນຢູ່ເບື້ອງເມືອ ໃນທາງດ້ານສັງຄົມແລ້ວ ການ ວັດ ແທ່ງການຜະລິດສຳ ແມ່ນການວັດແທ່ງການຜະລິດສຳ ກຳລັງການຜະລິດ ແລະ ການພົວພັນແທ່ງການຜະລິດ ແຕ່ຫາກຢືນຢູ່ເບື້ອງໝາກຜົນທາງດ້ານວັດຖຸ ເພື່ອ ເບິ່ງບັນຫາແລ້ວ ມັນກໍ່ແມ່ນການວັດ ແທ່ງການສ້າງ ໃຫ້ມີຜະລິດຕະພັນ ລວມ ຍອດ ຂອງສັງຄົມ.

ພາກສ່ວນ ປະກອບ ຂອງ ຜະລິດຕະພັນ ລວມ ຍອດ ຂອງ ສັງຄົມ

ໝາກຜົນ ຂອງ ການຜະລິດ ສຳ ຂອງ ສັງຄົມ ແບບ ສັງຄົມນິຍົມ ແມ່ນ ການ ສ້າງ ໃຫ້ ມີ ຜະລິດຕະພັນ - ລວມ ຍອດ ຂອງ ສັງຄົມ ແລະ ບັນ ພັນ ຖານ ອັນ ມີ ກໍ ແມ່ນ ການ ເພີ່ມ ທະ ວີ ຄວາມ ຮັ່ງ ມີ ຂອງ ສັງຄົມ ຂຶ້ນ ໃຫ້ ຫລາຍ. <u>ຄວາມ ຮັ່ງ ມີ ຂອງ ສັງຄົມ</u> ແມ່ນ ທັງ ໝົດ ລວມ ສານ ຄວາມ ຮັ່ງ ມີ ທາງ ດ້ານ ວັດ ຖຸ ທີ່ ສັງຄົມ ມີ ຢູ່. ຄວາມ ຮັ່ງ ມີ ທາງ ດ້ານ ວັດ ຖຸ ດັ່ງ ກ່າວ ແມ່ນ ໝາກ ຜົນ - ຂອງ ການ ເຄື່ອນ ໄຫວ ທາງ ດ້ານ ການ ຜະ ລິດ ບໍ່ ວ່າ ຂອງ ຄົນ ຮຸ່ນ ນີ້ ກໍ ຄື ຂອງ ຄົນ ຮຸ່ນ ກ່ອນ ໆ ທັງ ໝົດ. ແຕ່ ຄວນ ສັງ ເກດ ວ່າ ຄວາມ ຮັ່ງ ມີ ຂອງ ສັງຄົມ ບໍ່ ມີ ແຕ່ ຄວາມ ຮັ່ງ ມີ ທາງ ດ້ານ ວັດ ຖຸ ທີ່ ໄດ້ ມີ ການ ສະ ສົມ ໄວ້ ເທົ່າ ນັ້ນ. ມັນ ຍັງ ປະ ກອບ ທັງ ຊັບ ພະ ຍາ ກອນ ຢູ່ ໃນ ທຳ ມະ ຊາດ, ມີ ທັງ ຄວາມ ຮັ່ງ ມີ ທາງ ດ້ານ ຈິດ ໃຈ ແລະ ວັດ ທະ ນະ ທຳ ຂອງ ສັງຄົມ, ມີ ທັງ ທ່າ ແຮ ງ ທາງ ດ້ານ ວິ ທະ ຍາ ສາດ ແລະ ດ້ານ ການ ສຶກ ສາ, ມີ ທັງ ລະ ດັບ ລວມ ແລະ ໂຄງ ປະ ກອບ ຄວາມ ອຸ ດົມ ສົມ ບູນ ຂອງ ຊາວ ຜູ້ ອອກ ແຮງ ງານ ແລະ ມີ ທັງ ທ່າ ແຮ ງ ລະ ບົບ ການ ບໍ ລິ ການ ອີກ.

<u>ຜະ ລິດ ຕະ ພັນ ລວມ ຍອດ ຂອງ ສັງຄົມ</u> ແມ່ນ ທັງ ໝົດ ລວມ ສານ ຄວາມ ຮັ່ງ ມີ - ທາງ ດ້ານ ວັດ ຖຸ ທີ່ ສັງຄົມ ໄດ້ ສ້າງ ຂຶ້ນ ໃນ ໄລ ຍະ ເວ ລາ ໃດ ໜຶ່ງ ສະ ເພາະ ເຈາະ ຈົ່ງ (ທຳ ມະ ດາ ແມ່ນ ໃນ ໄລ ຍະ ໜຶ່ງ ປີ- ນັ້ນ ແມ່ນ ຜະ ລິດ ຕະ ພັນ ຂອງ ສັງຄົມ ໃນ ໜຶ່ງ ປີ). ຜະ ລິດ ຕະ ພັນ ລວມ ຍອດ ຂອງ ສັງຄົມ ແມ່ນ ສ້າງ ຂຶ້ນ ດ້ວຍ ແຮງ ງານ - ຂອງ ຊາວ ຜູ້ ອອກ ແຮງ ງານ ໃນ ຂົງ ເຂດ ການ ຜະ ລິດ ວັດ ຖຸ ເຊັ່ນ ອຸ ດສາ ຫະ ກຳ, ການ ກະ ສິ ກຳ, ການ ຂົນ ສົ່ງ, ການ ສື ສານ ກໍ ຄື ສ້າງ ຂຶ້ນ ດ້ວຍ ແຮງ ງານ ຂອງ ຊາວ ຜູ້ ອອກ ແຮງ ງານ ໃນ ພາກ ສ່ວນ ຂະ ແໜງ ການ ຄ້າ ຍ່ອມ ມີ ການ ສືບ ຕໍ່ ດຳ ເນີນ ການ ວັດ ແທ່ງ ການ ຜະ ລິດ (ການ ຫຸ້ມ ຫໍ່, ການ ເລືອກ ເຟັ້ນ ປະ ເພດ ສິນ ຄ້າ,

ການເກັບມ້ຽນ, ການຂົນສົ່ງ).

ນອກຈາກແຮງງານທີ່ໃຊ້ເຂົ້າໃນການຜະລິດວັດຖຸແລ້ວ ພາຍໃຕ້ ລະບອບ ສັງຄົມນິຍົມ ແຮງງານພາກສ່ວນໜຶ່ງ ຍັງຖືກໃຊ້ເຂົ້າໃນການຄຸ້ມຄອງລັດ, ວັດ ທະນະທຳ, ການບໍລິການປະຊາຊົນ ທາງດ້ານຊົວິດປະຈຳວັນ ແລະດ້ານ ປ້ອງ ປ້ອພະຍາດ. ການອອກແຮງງານ ຂອງຊາວຜູ້ອອກແຮງງານໃນຂົງເຂດນີ້ ບໍ່ ປະກອບເຂົ້າໂດຍກົງ ໃນການສ້າງຜະລິດຕະພັນລວມຍອດຂອງສັງຄົມ ແຕ່ນັ້ນ ແມ່ນການອອກແຮງງານ ທີ່ມີຜົນປະໂຫຍດທາງດ້ານສັງຄົມ ແລະ ມີຄວາມຈຳ ເປັນສຳລັບສັງຄົມ. ມັນຮຽກໃຫ້ມີເງື່ອນໄຂ ເພື່ອສ້າງຜະລິດຕະພັນລວມຍອດ ຂອງສັງຄົມ.

ຢູ່ໃນສັງຄົມ ສັງຄົມນິຍົມ ຜະລິດຕະພັນລວມຍອດຂອງສັງຄົມ ເຕີບໃຫຍ່-ຂະຫຍາຍຕົວ ຢ່າງມີແຜນການ ແລະ ຢ່າງລຽນຕິດ ດ້ວຍຈັງຫວະອັນວ່ອງໄວ ຕົວຢ່າງ ກໍຄືວ່າ ນັບແຕ່ປີ ໑໙໔໐ ຮອດ ປີ ໑໙໗໐ ຜະລິດຕະພັນລວມຍອດ-ຂອງສັງຄົມຢູ່ ສ.ສ.ສ.ຊ ໄດ້ເພີ່ມຂຶ້ນ ໑໓,໒ ເທື່ອ.

ພາຍໃຕ້ລະບອບສັງຄົມນິຍົມ ປັດໄຈແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງ ຜະລິດຕະພັນລວມຍອດ ຂອງສັງຄົມມີຫຍັງແດ ?

ເນື່ອງຈາກວ່າຜະລິດຕະພັນລວມຍອດຂອງສັງຄົມ ແມ່ນສ້າງຂຶ້ນດ້ວຍການ ອອກແຮງງານ ຢູ່ໃນຂະແໜງການຕ່າງໆ ໃນຂົງເຂດການຜະລິດວັດຖຸ ດັ່ງ ນັ້ນ ການເຕີບໃຫຍ່ຂອງມັນ ຈຶ່ງຂຶ້ນກັບຈຳນວນຊາວຜູ້ອອກແຮງງານຢູ່ໃນ ຂົງ ເຂດດັ່ງກ່າວນີ້. ແຕ່ເຖິງຢ່າງໃດກໍດີ ການເພີ່ມຈຳນວນຊາວຜູ້ອອກແຮງງານ ແມ່ນເສັ້ນທາງຂະຫຍາຍການຜະລິດແບບເປີດກວ້າງ ບໍ່ວ່າ ຢູ່ວິສາຫະກິດໃດ ໜຶ່ງສະເພາະ ກໍຄືຢູ່ໃນເສດຖະກິດແຫ່ງຊາດທັງໝົດ. ປັດໄຈອັນນີ້ ກໍບໍ່ອາດ ຈະຖືໄດ້ວ່າເປັນບໍ່ເກີດອັນໜຶ່ງອັນດຽວເທົ່ານັ້ນ ແຫ່ງການເຕີບໃຫຍ່ຂະຫຍາຍ ຕົວ ຂອງຜະລິດຕະພັນລວມຍອດຂອງສັງຄົມ. ຄວນຈະຕ້ອງຄຳນຶງວ່າມີຄວາມ ອາດສາມາດຈຳກັດທີ່ສຸດ ທີ່ແຮໄວ້ກ່ຽວກັບການເພີ່ມຈຳນວນພົນຜູ້ທີ່ຮັດວຽກ ງານຢູ່ໃນຂົງເຂດ ການຜະລິດນັ້ນ.

ປັດໄຈອັນຕົ້ນຕໍແຫ່ງການເຕີບໃຫຍ່ຂະຫຍາຍຕົວ ຂອງຜະລິດຕະພັນລວມ-ຍອດຂອງສັງຄົມ ແມ່ນການເຕີບໃຫຍ່ຂະຫຍາຍຕົວຂອງສະມັດຖະພາບ ຂອງ ການອອກແຮງງານບົນພື້ນຖານ ການເສີມຂະຫຍາຍຄວາມກ້າວໜ້າທາງດ້ານ

ວິທະຍາສາດ-ເຕັກນິກ ຢ່າງບໍ່ຢຸດຢັ້ງ, ການຍົກສູງລະດັບຄວາມຊຳນິຊຳນານ ຂອງກຳມະກອນ, ຊາວນາລວມໝູ່, ພະນັກງານວິສະວະກອນ-ເຕັກນິກແລະ ພາລະກອນ, ການນຳໃຊ້ທຶນການຜະລິດຢ່າງຖືກຕ້ອງເໝາະສົມກວ່າເກົ່າ , ແລະ ການນຳໃຊ້ເຂົ້າໃນພາກຕົວຈິງ ວິທີການຈັດຕັ້ງການອອກແຮງງານແລະ ການຜະລິດແບບວິທະຍາສາດ. ນີ້ແມ່ນເສັ້ນທາງເພີ່ມທະວີຜະລິດຕະພັນລວມ-ຍອດຂອງສັງຄົມແບບສຸມ. ຢູ່ພາຍໃຕ້ລະບອບສັງຄົມນິຍົມ ວິທີການນັ້ນ ບໍ່ຖືກ ຈຳກັດ ແລະ ທັງບໍ່ມີຂອບເຂດ.

ມີການຜະລິດສຳ ຜະລິດຕະພັນລວມຍອດຂອງສັງຄົມ ບໍ່ວ່າອອກມາ ເປັນ ຮູບການວັດຖຸ-ສິ່ງຂອງ ກໍ່ລ້ວນເປັນມູນຄ່າ.

ອີງຕາມ<u>ຮູບການເປັນວັດຖຸ-ສິ່ງຂອງ</u>ຂອງມັນແລ້ວ ຜະລິດຕະພັນລວມຍອດ ຂອງສັງຄົມປະກອບມີ:

໑) ພາຫະນະການຜະລິດ ໝາຍຄວາມວ່າ ເຄື່ອງຮັບໃຊ້ການຜະລິດ - (ເຄື່ອງຈັກ, ວັດຖຸດິບ, ພັດສະດຸ; ເຊື້ອເພີງ ແລະ ອື່ນໆ).

໒) ເຄື່ອງໃຊ້ສອຍສ່ວນຕົວ (ເຄື່ອງນຸ່ງຫົ່ມ, ເກີບ, ເຄື່ອງກິນ, - ເຮືອນຢູ່, ເຄື່ອງໃຊ້ສອຍໃນຊີວິດຄອບຄົວ ແລະ ອື່ນໆ).

ເພີ່ມມີການນຳໃຊ້ເຄື່ອງຮັບໃຊ້ການຜະລິດເພື່ອທົດແທນຄືນ ຄ່າພາຫະນະ ການຜະລິດ ທີ່ໄດ້ໃຊ້ຈ່າຍໄປແລ້ວນັ້ນ, ເພື່ອສືບຕໍ່ເປີດກ້ວາງ ການຜະລິດ (ການສະສົມ) ແລະ ເພື່ອສ້າງຄວາມອາດສາມາດບົ່ມຊ້ອນ ແລະກຳລັງແຮງ ງານ ສະສົມໄວ້ໃນການຜະລິດ.

ເຄື່ອງໃຊ້ສອຍສ່ວນຕົວຖືກນຳໃຊ້ ເພື່ອຕອບສະໜອງຄວາມຮຽກ ຮ້ອງ ຕ້ອງການ ຂອງຊາວຜູ້ອອກແຮງງານ ຜູ້ທີ່ຮັດວຽກງານ ແລະ ຜູ້ທີ່ຂາດຮັດ ການຜະລິດໃໝ່, ຂອງໝົດທຸກຄົນຢູ່ໃນສັງຄົມ ຜູ້ທີ່ອອກແຮງງານບໍ່ໄດ້ ກໍ່ ເພື່ອເປັນການສະສົມເຄື່ອງໃຊ້ສອຍໄວ້ໃຫ້ເປັນຂອງລັດ.

ສະຫລຸບຄວາມໄດ້ວ່າ, ຈາກກະໂຕລວມປະໂຫຍດຂອງເຄື່ອງຂອງທີ່ ປະ ກອບຂຶ້ນຢູ່ໃນຜະລິດຕະພັນລວມຍອດຂອງສັງຄົມນັ້ນເອງ ການຜະລິດຂອງສັງ ຄົມແມ່ນແບ່ງອອກເປັນສອງໝວດພົ້ນຖານຄື: <u>ການຜະລິດພາຫະນະການ ຜະ ລິດ</u> (ໝວດ ທີ ໑), ການຜະລິດເຄື່ອງໃຊ້ສອຍ (ໝວດ ທີ ໒).

<u>ຖ້າຄິດໄລ່ຕາມມູນຄ່າແລ້ວ</u> ຜະລິດຕະພັນລວມຍອດຂອງສັງຄົມ ແມ່ນປະ

ກອບດ້ວຍສາມພາກສ່ວນຄື: ๑) ຄຸນຄ່າຂອງພາຫະນະການຜະລິດທີ່ໄດ້ໃຊ້-ຈ່າຍໄປແລ້ວຊຶ່ງຖືກສົ່ງເຂົ້າໃນຜະລິດຕະພັນສຳເລັດຮູບ, ๘) ຄຸນຄ່າທີ່ສ້າງຂຶ້ນມາໃຫມ່ເພື່ອການຊົມໃຊ້ສ່ວນຕົວ ຂອງຊາວຜູ້ອອກແຮງງານ, ๙) ຄຸນຄ່າທີ່ສ້າງຂຶ້ນມາໃຫມ່ ເພື່ອຄຸນປະໂຫຍດການເປີດກວ້າງການຜະລິດ ແລະ ການເປີດກວ້າງທຶນເພື່ອການຊົມໃຊ້ຂອງສັງຄົມ.

ແຕ່ລະພາກສ່ວນອັນນີ້ມີບົດບາດສະເພາະ ຢູ່ໃນການວິວັດແຫ່ງການຜະລິດສຳ. ພາກສ່ວນທີ່ຫນຶ່ງແມ່ນ ທຶນຮັບໃຊ້ການທົດແທນຄືນ (ໄລ່ຕາມຄຸນຄ່າ) ຄ່າພາຫະນະການຜະລິດທີ່ໄດ້ໃຊ້ຈ່າຍໄປແລ້ວນັ້ນ ຫມາຍຄວາມວ່າຄ່າຫລຸ້ຍ - ຫ້ຽນຂອງເຄຫາສະຖານ, ຕຶກ, ແມ່ຈັກ, ເຄື່ອງຈັກ, ກົນໄກ, ວັດຖຸດິບ ທີ່ໄດ້ໃຊ້ສອຍໄປແລ້ວ, ເຊື້ອເພີງ, ພະລັງງານໄຟຟ້າ ແລະ ພາກສ່ວນປະ - ກອບອື່ນໆ ທີ່ຮັບໃຊ້ການຜະລິດ.

ພາກສ່ວນທີສອງຂອງຄຸນຄ່າຜະລິດຕະພັນຂອງສັງຄົມ ແມ່ນທຶນ ທີ່ຮັບໃຊ້ການທົດແທນຄືນຄ່າໃຊ້ຈ່າຍແຮງງານ ຫມາຍຄວາມວ່າ ຮັບໃຊ້ການທົດແທນ-ຄືນ ຄ່າເຄື່ອງຂອງທີ່ຊາວຜູ້ອອກແຮງງານໃນຂົງເຂດການຜະລິດ ໄດ້ຊົມ ໃຊ້ໄປແລ້ວ .

ພາກສ່ວນທີສາມຂອງຜະລິດຕະພັນລວມຍອດຂອງສັງຄົມ ປະກອບດ້ວຍຄຸນຄ່າຜະລິດຕະພັນສ່ວນເກີນ ແລະ ກໍ່ແມ່ນທຶນທີ່ຮັບໃຊ້ ບໍ່ແມ່ນແຕ່ການໃຊ້ ຈ່າຍໃນການລ້ຽງດູພາກສ່ວນທີ່ບໍ່ແມ່ນການຜະລິດເທົ່ານັ້ນ ແຕ່ຍັງຮັບໃຊ້ການສ້າງ-ທຶນ ເພື່ອເປີດກວ້າງການຜະລິດ (ຄັ່ງເພື່ອການສະສົມ).

ເງື່ອນໄຂເພື່ອການຈຳຫນ່າຍ ຜະລິດຕະພັນລວມຍອດ ຂອງສັງຄົມ

ການຈຳຫນ່າຍຜະລິດຕະພັນລວມຍອດຂອງສັງຄົມ ທີ່ຜະລິດອອກມາໄດ້ ໃນໄລຍະ - ຫນຶ່ງປີນັ້ນ ຕ້ອງມີແຜນການ. ການ ຈຳຫນ່າຍ ຜະລິດຕະພັນລວມຍອດຂອງສັງຄົມ ແມ່ນດຳເນີນໄປຜ່ານການແລກປ່ຽນນຳກັນ ລະຫວ່າງຫມວດ ທີ ๑ ກັບ ຫມວດ ທີ ๘ ແລະ ຜ່ານການແລກປ່ຽນນຳກັນ ຢູ່ພາຍໃນແຕ່ລະຫມວດ.

ກ່ອນອື່ນຫມົດ ພວກເຮົາຈົ່ງພ້ອມກັນມາເບິ່ງວ່າການຈຳຫນ່າຍ ຜະລິດຕະພັນ ຂອງວິສາຫະກິດຕ່າງໆໃນຫມວດ ທີ ๑ ແມ່ນເປັນໄປຄືແນວໃດ.

ເພື່ອຢາກໃຫ້ການວິວັດແຫ່ງການຜະລິດຢູ່ໃນໝວດທີ ๑ ມີຂົ້ນໃໝ່ຢູ່ເລື້ອຍໆ, ຈຳເປັນທີ່ຈະຕ້ອງມີການທົດແທນຄືນຢ່າງເປັນປະຈຳ ຄ່າພາຫະນະການຜະລິດ ທີ່ໄດ້ໃຊ້ຈ່າຍໄປແລ້ວ ຢູ່ໃນໝວດດັ່ງກ່າວ. ສິ່ງດັ່ງກ່າວນີ້ ມີຂົ້ນໄດ້ໂດຍຜ່ານ ການແລກປ່ຽນນຳກັນ ລະຫວ່າງຂະແໜງການຕ່າງໆ ຢູ່ພາຍໃນໝວດດັ່ງ - ກ່າວ. ຍົກຕົວຢ່າງ, ຊຸດສາຫະກຳຊຸດຄົ້ນແຮ່ເຫລັກ ແລະ ຖ່ານຫີນເປັນຜູ້ປະ ກອບວັດຖຸດິບ ແລະ ເຊື່ອເພີງໃຫ້ຊຸດສາຫະກຳຫລອມໂລຫະ, ຊຸດສາຫະ ກຳ ຫລອມໂລຫະພັດເປັນຜູ້ຈັດສົ່ງໂລຫະໄປໃຫ້ຊຸດສາຫະກຳຫລ່ອມໂລຫະເພື່ອເປັນ ການຕອບແທນຄືນ ແລະ ອື່ນໆ.ລະຫວ່າງຂະແໜງການຕ່າງໆໃນໝວດທີ ๑ ມັນມີການປະຕິບັດຢ່າງມີແຜນການ ການແລກປ່ຽນພາຫະນະການຜະລິດ ທີ່ມີ ຄວາມຈຳເປັນຢູ່ໃນຂະແໜງການດັ່ງກ່າວນີ້ ເພື່ອສືບຕໍ່ການຜະລິດ.ພາກສ່ວນ ໜຶ່ງຂອງຜະລິດຕະພັນໝວດທີ ๑ ແມ່ນມີການຈຳໜ່າຍອອກຄືແນວນັ້ນລະ.

ອີກພາກສ່ວນໜຶ່ງຂອງຜະລິດຕະພັນໝວດທີ ๑ແມ່ນຮັບໃຊ້ເພື່ອການ ທົດ ແທນຄືນຄ່າພາຫະນະການຜະລິດ ທີ່ໄດ້ໃຊ້ຈ່າຍໄປແລ້ວ ໃນໝວດທີ ๔.ແລະ ສຸດທ້າຍພາກສ່ວນທີສາມ ທີ່ສ້າງຂົ້ນມາດ້ວຍສ່ວນເກີນນັ້ນ ກໍ່ແມ່ນໃຊ້ເພື່ອເປີດ ກວ້າງການຜະລິດ ແລະ ຂະຫຍາຍເປີດກວ້າງໝວດ ທີ ๑ ແລະ ທີ ๔.

ຢູ່ໃນໝວດທີ ๔ເຊັ່ນດຽວກັນກັບຢູ່ໃນໝວດທີ ๑ ພາກສ່ວນໜຶ່ງຂອງຜະ ລິດຕະພັນ ທີ່ເຮັດຂົ້ນມາໄດ້ນັ້ນ ແມ່ນມີການຈຳໜ່າຍອອກ ຜ່ານການແລກ - ປ່ຽນຢູ່ພາຍໃນນຳກັນ ລະຫວ່າງຂະແໜງການຕ່າງໆ ແລະ ມັນກໍ່ຖືກສົ່ງ ໄປ ສະໜອງ ການຊົມໃຊ້ສ່ວນຕົວ ຂອງຊາວຜູ້ອອກແຮງງານ ຢູ່ໃນຂະແໜງ - ການຕ່າງໆ ຂອງໝວດນີ້. ອີກພາກສ່ວນໜຶ່ງຂອງມັນ ມີລຸນປະໂຫຍດ ເພື່ອ ຮັບໃຊ້ຊາວຜູ້ອອກແຮງງານຢູ່ໝວດທີ ๑. ພາກສ່ວນໜຶ່ງທີ່ແມ່ນອນຂອງຜະ ລິດຕະພັນໝວດ ທີ ๔ ຈະຕ້ອງຖືກສົ່ງໄປສະໜອງຊາວຜູ້ອອກແຮງງານ ທີ່ຖືກ ລະດົມເພີ່ມເຕີມໃຫ້ເຂົ້າຮ່ວມການຜະລິດ ແລະ ສະໜອງພວກທີ່ເຮັດວຽກ - ງານຢູ່ໃນຂົງເຂດທີ່ບໍ່ແມ່ນການຜະລິດ ກໍ່ຄືພວກທີ່ອອກແຮງງານບໍ່ໄດ້ຢູ່ໃນ ສັງ ຄົມ.

ມີການແລກປ່ຽນເຄື່ອງຂອງນຳກັນ ຢ່າງມີແຜນການລະຫວ່າງໝວດທີ ๑ ແລະໝວດທີ ๔. ໝວດທີ ๑ ເຮັດໜ້າທີ່ສະໜອງແມ່ຈັກ, ເຄື່ອງຈັກ,ກົນ ໄກ, ເຊື່ອເພີງ, ພັດສະດຸ ແລະ ອື່ນໆ ໃຫ້ແກ່ຂະແໜງການຕ່າງໆ ຂອງ

ໝວດທີ ๔ ເພື່ອເປັນການທົດແທນຄົນພາຫະນະແຫ່ງການຜະລິດ ທີ່ໄດ້ມີການໃຊ້ຈ່າຍໄປແລ້ວ ແລະ ເພື່ອສືບຕໍ່ເປີດກວ້າງການຜະລິດ. ໝວດທີ ๔ ຮັດໜ້າທີ່ສະໜອງເຄື່ອງຊົມໃຊ້ໃຫ້ແກ່ໝວດທີ ๑ ເພື່ອຮັບປະກັນຄວາມຮຽກ - ຮ້ອງຕ້ອງການສ່ວນຕົວຂອງຊາວຜູ້ອອກແຮງງານໃນໝວດທີ ๑ ແລະ ເພື່ອ ເພີ່ມທະວີທຶນ ເພື່ອການຊົມໃຊ້ຂອງພວກເຂົາເຈົ້າ ເມື່ອງຈາກວ່າການຊົມໃຊ້ ໄດ້ມີການເຕີບໃຫຍ່ຂະຫຍາຍຕົວ ແລະ ກໍໄດ້ມີການຕັ້ງບັນຫາຂຶ້ນໃຫ້ສືບຕໍ່ເປີດ ກວ້າງໜົດທຸກຂະແໜງການຜະລິດຢູ່ໃນໝວດທີ ๑ ແລະ ໃຫ້ລະດົມ ເອົາ ຊ່ຳວຜູ້ອອກແຮງງານຜູ້ໃໝ່ເຂົ້າປະກອບຢູ່ໃນໝວດທີ ๑.

ສະຫລຸບແລ້ວມັນມີການເໜັ້ງຕີງເປັນປະຈຳ ມີການແລກປ່ຽນເຊິ່ງກັນແລະ ກັນ ລະຫວ່າງໜົດທຸກພາກສ່ວນປະກອບ ຂອງຜະລິດຕະພັນລວມຍອດຂອງສັງ ຄົມ ບໍ່ວ່າພາຍໃຕ້ຮູບການເປັນວັດຖຸ ກໍ່ຄືເປັນເງິນ.

ເພື່ອຢາກປະຕິບັດການຜະລິດສຳ ເປີດກວ້າງແບບສັງຄົມນິຍົມ ໃຫ້ ໄດ້ ຢ່າງເນື້ອງນິດລຽນຕິດ ຈຳເປັນທີ່ຈະຕ້ອງມີເງື່ອນໄຂດັ່ງລຸ່ມນີ້:

ກ່ອນອື່ນໜົດ ຖ້າຄິດໄລ່ເປັນລຸມຄ່າ ແລະ ເປັນວັດຖຸແລ້ວ ຜະລິດຕະພັນ ໃນປີໜຶ່ງຂອງໜວດທີ ๑ ຊຶ່ງປະກອບດ້ວຍພາຫະນະການຜະລິດ ຈະຕ້ອງໃຫ້ ມີຢ່າງພຽງພໍ ເພື່ອ: ก) ທົດແທນໃຫ້ໄດ້ຢ່າງເຕັມສ່ວນ ບໍ່ວ່າເປັນວັດຖຸກໍ່ຄື ເປັນລຸມຄ່າ ທຶນການຜະລິດໄດ້ມີການຊົມໃຊ້ໄປແລ້ວ ຢູ່ໃນທ້ວງສອງໜວດຜ່ານ ການສ້າງຜະລິດຕະພັນລວມຍອດຂອງສັງຄົມ; ข) ເພີ່ມທະວີທຶນການຜະລິດຢູ່ ໃນທ້ວງສອງໜວດ ໂດຍສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ອັນນັບມື້ ນັບ ທະວີຂຶ້ນຂອງສັງຄົມ ໝາຍຄວາມວ່າ ປະຕິບັດການສະສົມພາຫະນະ ການ ຜະລິດທີ່ມີຄວາມຈຳເປັນ ເພື່ອເປີດກວ້າງຂະໜາດຂອງການຜະລິດ;ค)ສ້າງ ກຳລັງແຮງສະສົມ ແລະ ຄວາມອາດສາມາດບໍ່ມ້ອນໄວ້ ກ່ຽວກັບທຶນການຜະ ລິດອັນຈຳເປັນສຳລັບສັງຄົມ.

ອັນທີ່ສອງ, ຖ້າຄິດໄລ່ເປັນວັດຖຸ ແລະ ເປັນລຸມຄ່າແລ້ວ ຜະລິດຕະພັນ- ໃນປີໜຶ່ງ ຂອງໜວດທີ ๔ ຊຶ່ງປະກອບດ້ວຍເຄື່ອງໃຊ້ສອຍ ຈະຕ້ອງໃຫ້ ມີ ພຽງພໍເພື່ອ: ก) ຮັບປະກັນໃຫ້ຊາວຜູ້ອອກແຮງງານ ຢູ່ໃນທ້ວງສອງໜວດ ຂອງການຜະລິດສັງຄົມນິຍົມ ບໍ່ວ່າພວກທີ່ເຮັດວຽກມາແລ້ວ ກໍ່ຄືພວກທີ່ຖືກ ລະ ດົມໃຫ້ມາເຮັດວຽກໃໝ່ນັ້ນ ໄດ້ຮັບເຄື່ອງໃຊ້ສອຍ ໂດຍອີງໃສ່ຫລັກການທີ່ວ່າ

" ແຕ່ລະຄົນໄດ້ຮັບຕາມແຮງງານ "; ຂ) ອີງຕາມຫລັກການດັ່ງກ່າວນີ້ ຮັບ-ປະກັນສຳລັບຊາວຜູ້ອອກແຮງງານ ທີ່ເຮັດວຽກຢູ່ໃນຂົງເຂດທີ່ບໍ່ແມ່ນການຜະ-ລິດ (ການຊຸ້ມຄອງ, ການສຶກສາ, ສາທາລະນະສຸກ ແລະ ອື່ນໆ); ຄ) ສ້າງກຳລັງແຮງສະສົມ ແລະ ຄວາມອາດສາມາດບໍ່ມ້ອນກ່ຽວກັບເຄື່ອງ ໃຊ້ສອຍອັນຈຳເປັນ ສຳລັບສັງຄົມ. ມີແຕ່ປະຕິບັດເງື່ອນໄຂດັ່ງກ່າວນີ້ເທົ່ານັ້ນ ຈຶ່ງຈະສາມາດຮັບປະກັນໃຫ້ມີ ການຜະລິດສຳ ຜະລິດຕະພັນລວມຍອດຂອງສັງ ຄົມແບບເປີດກ້ວາງໄດ້ .

ການເພີ່ມທະວີການຜະລິດ ພາຫະນະການຜະລິດ ເປັນຈຸດໜັກ

ເງື່ອນໄຂອັນສຳຄັນຍິ່ງ ທີ່ມີຄວາມຈຳເປັນ - ເພື່ອຈະປະຕິບັດການຜະລິດສຳ ເປີດ ກ້ວາງ ແບບສັງຄົມນິຍົມ ແມ່ນບັນຫາການເພີ່ມທະ ວີ ການຜະລິດພາຫະນະ ການຜະລິດ (ໝວດ ທີ ๑) ເປັນຈຸດໜັກ ໝາຍຄວາມວ່າ ຢ່າງໄວວາກວ່າ ແລະ ຢ່າງ ກ້າວ ໄປກ່ອນຂັ້ນໜຶ່ງ ຖ້າສົມທຽບໃສ່ກັບ ການຜະລິດເຄື່ອງໃຊ້ສອຍ (ໝວດທີ๒). ເພື່ອຢາກເປີດກ້ວາງການຜະລິດໄດ້ ມີຄວາມຈຳເປັນທີ່ຈະຕ້ອງຜະລິດ ກ່ອນ-ອື່ນໝົດແມ່ນ ພາຫະນະການຜະລິດ ແລະ ໃນນັ້ກແມ່ນໃຫ້ຜະລິດອອກມາເປັນ ຈຳນວນຫລວງຫລາຍ ພຽງພໍ່ສະເພາະແຕ່ ເພື່ອຈະໄປທົດແທນຄືນຄ່າພາຫະ ນະການຜະລິດ ທີ່ໄດ້ມີການໃຊ້ໄປແລ້ວ ຜ່ານການຜະລິດ ແຕ່ຍັງຕ້ອງໃຫ້ມັນ ພຽງພໍ ທັງເພື່ອໃຫ້ການເປີດກ້ວາງບໍລິມາດການຜະລິດ ຢູ່ໃນໝົດທຸກ ຂະ ແໜງການ ຂອງເສດຖະກິດແຫ່ງຊາດ.

ອ.ອີ.ເລນິນ ໄດ້ຖືເອົາການເພີ່ມທະວີການຜະລິດພາຫະນະ ການຜະລິດ ເປັນຈຸດໜັກ ເປັນກົດເກນເສດຖະກິດ ກ່ຽວກັບການຜະລິດສຳແບບເປີດ - ກ້ວາງ.

ທາດແທ້ເນື້ອໃນຂອງກົດເກນດັ່ງກ່າວນີ້ມີຫຍັງແດ່ ?

ການຂະຫຍາຍຕົວຂອງກຳລັງການຜະລິດຂອງສັງຄົມ, ຄວາມກ້າວ ໜ້າ ທາງດ້ານເຕັກນິກ ລ້ວນແຕ່ໄປພ້ອມໆກັນ ກັບການເພີ່ມທະວີອັດຕາສ່ວນ ແຮງ ງານເປັນອັດຖຸ (ທີ່ຜ່ານມາ) ແລະ ການຫລຸດຜ່ອນພຸດຂອງແຮງງານ - "ເປັນ" ຢູ່ໃນຜະລິດຕະພັນຂອງສັງຄົມ. ນັບມື້ນັບມີການປ່ຽນຈາກການ ອອກ

ແຮງງານທາງຕົນມີ ມາເປັນການອອກແຮງງານແບບໃຊ້ເຄື່ອງຈັກເຄື່ອງລາງ ນັ້ນ ເປັນການຍົກສູງສະມັດຖະພາບຂອງການອອກແຮງງານຂຶ້ນ ແລະ ກໍ່ ທັງ ເປັນການເພີ່ມທະວີຂະໜາດ ແລະ ຂົງເຂດຂອງການຜະລິດອອກຕື່ມ. ການ ເພີ່ມທະວີການຜະລິດພາຫະນະການຜະລິດເປັນຈຸດໜັກ ເປັນການສອງແສງ-ເຖິງການປ່ຽນຈາກ ການອອກແຮງງານທາງຕົນມີ ມາເປັນການອອກແຮງ - ງານແບບໃຊ້ເຄື່ອງຈັກເຄື່ອງລາງ ກໍ່ເຖິງຄວາມກ້າວໜ້າທາງດ້ານເຕັກນິກ ພາຍໃຕ້ລະບອບອຸດສາຫະກຳແບບໃຊ້ເຄື່ອງຈັກ ເຄື່ອງລາງເວົ້າລວມ. ໃນນັ້ນ ມັນກໍ່ເປັນທັງຜົນສະທ້ອນ ແລະ ກໍ່ເປັນທັງເງື່ອນໄຂທີ່ພາໃຫ້ມີຄວາມກ້າວໜ້າ ທາງດ້ານເຕັກນິກ. ການຜະລິດສຳແບບເປີດກ້ວາງ ທີ່ດຳເນີນໄປບົນພື້ນຖານ ຄວາມກ້າວໜ້າທາງດ້ານເຕັກນິກ ແມ່ນຕິດພັນຢ່າງສະໜິດແໜ້ນ ກັບ ການ ເພີ່ມທະວີ ການຜະລິດພາຫະນະ ການຜະລິດເປັນຈຸດໜັກ.

ໂດຍແຕກຕ່າງກັບຢູ່ໃນລະບອບທຶນນິຍົມ ພາຍໃຕ້ລະບອບສັງຄົມນິຍົມການ ເພີ່ມທະວີ ການຜະລິດພາຫະນະ ການຜະລິດເປັນຈຸດໜັກ ມີເນື້ອໃນອັນໃໝ່ ທາງດ້ານຈຸນນະພາບ. ມັນປະຕິບັດໄປບົ່ນແມ່ນແຍກຕາມມີຕາມເກີດ ແລະແຍກ ເປັນຮອບໜູນວຽນ ແຕ່ຫາກປະຕິບັດໄປຢ່າງມີສະຕິສຳນຶກ ແລະ ຢ່າງມີແຜນ ການ ເພື່ອຈຸດປະສົງ ຮັບປະກັນ ໃຫ້ປະຊາຊົນທັງໝົດ ມີລະດັບຄວາມຢູ່ດີກິນ ດີສູງຂຶ້ນຢ່າງບໍ່ຢຸດຢັ້ງ ແລະ ບໍ່ແມ່ນເພື່ອຈຸດປະສົງເຮັດໃຫ້ ພວກນາຍທຶນຮັ່ງມີ ຂຶ້ນຕື່ມ.

ມີແຕ່ພາຍໃຕ້ເງື່ອນໄຂເພີ່ມທະວີການຜະລິດພາຫະນະ ການຜະລິດ ເປັນ ຈຸດໜັກເທົ່ານັ້ນ ຈຶ່ງມີຄວາມສາມາດບັນລຸເຖິງເປົ້າໝາຍ ຂອງສັງຄົມນິ ຍົມ ໄດ້. ຂະແໜງການຍ່ອມຕອບສະໜອງຄວາມຕ້ອງການຂອງຄົນ ກຽວກັບ - ເຄື່ອງ ໃຊ້ສອຍຊັ້ນ ອຸດສາຫະກຳເບົາ ແລະ ອຸດສາຫະກຳສະບຽງອາຫານ ແລະ ການກະສິກຳ ຈະສາມາດມີການຂະຫຍາຍຕົວ ແລະ ເປີດກ້ວາງ ການ ຜະລິດຂອງຕົນໄດ້ຢ່າງມີໄຊ ກໍ່ຕໍ່ເມື່ອວ່າໜວດທີ ໑ ຈະສະໜອງຂະ ແໜງ ການດັ່ງກ່າວນີ້ ດ້ວຍເຄື່ອງຈັກອຸປະກອນຕ່າງໆ ພະລັງງານໄຟຟ້າ, ວັດຖຸດິບຈຳ ນວນທີ່ຕ້ອງການ ແລະ ໃນເມື່ອຈະມີການຮັບປະກັນ ເຮັດໃຫ້ຂະແໜງການ-ດັ່ງກ່າວນີ້ ມີຄວາມກ້າວໜ້າທາງດ້ານເຕັກນິກ. ຍົກຕົວຢ່າງ, ເພື່ອ ຢາກ ເພີ່ມທະວີ ການຜະລິດແຜ່ນແພໄດ້ ໃນຂັ້ນທຳອິດ ມັນຮຽກຮ້ອງໃຫ້ມີການ ຜະ

ລິດເຄື່ອງຈັກຕ່ຳແຜ່ນຊະນິດມີສະມັດຖະພາບສູງແລະ ເຄື່ອງຈັກອື່ນໆຫລາຍຂໍ້ນ ກວ່າເກົ່າອີກ. ຢູ່ ສ.ສ.ສ.ຊ ໃນແຕ່ລະປີ ຂະແຫນງການອຸດສາຫະກຳຫນັກ ເພີ່ມທະວີການຜະລິດ ອຸປະກອນ ແລະ ວັດຖຸດິບສຳລັບຂະແຫນງການ ອຸດສາ ຫະກຳເບົາ. ມີການຜະລິດສິນຄ້າໃຊ້ສອຍທົ່ວໄປ ຢູ່ໃນຂອບເຂດ ທີ່ນັບມື້ ນັບ ກວ້າງຂວາງອອກຢູ່ເລື້ອຍໆ. ຈາກນີ້ຈົ່ງເຫັນໄດ້ວ່າບໍ່ອາດຈະມີ ຫຍັງຂັດກັນ ລະຫວ່າງຫມວດ ທີ ຈ ແລະ ທີ ຄ. ຕົວຢ່າງອັນເດັ່ນຊັດທີ່ສ່ອງແສງ ເຖິງ ສິ່ງທີ່ໄດ້ເວົ້າມານີ້ ກໍ່ຄືເລື່ອງການນຳໃຊ້ເຄື່ອງເຄມີເຂົ້າໃນເສດຖະກິດ ແຫ່ງ ຊາດ ທີ່ກວມເອົາທັງຂົງເຂດການຜະລິດ ແລະ ຂົງເຂດການຊົມໃຊ້ແລະກວມ ເອົາທັງຫມວດທີ ຈແລະ ຫມວດທີ ຄຂອງການຜະລິດຂອງສັງຄົມ.

ການເພີ່ມທະວີຈັງຫວະຂະຫຍາຍຕົວຂອງຫມວດທີ ຈຢ່າງເລັ່ງລັດບໍ່ຫມາຍ ວ່າກົດເກນວ່າດ້ວຍການເພີ່ມທະວີການຜະລິດພາຫະນະການຜະລິດ ເປັນຈຸດ ຫນັກນັ້ນຫມົດຜົນສັກສິດໄປແລ້ວ ຢູ່ໃນມະຕິຕົກລົງຂອງກອງປະຊຸມໃຫຍ່ຄັ້ງທີ ຄຜ ຂອງ ພ.ກ.ສ.ຊ ໄດ້ເວົ້າວ່າ "ໃຫ້ເສີມຂະຫຍາຍດ້ວຍຈັງຫວະອັນວ່ອງໄວໄປ ກ່ອນກ້າວຫນຶ່ງ ບັນດາຂະແຫນງການທີ່ຮັບປະກັນ ໃຫ້ເກີດມີການຄືບຫນ້າທາງ ດ້ານໂຄງປະກອບ ຢູ່ໃນເສດຖະກິດແຫ່ງຊາດ ແລະ ໃຫ້ມີການຜະລິດສຳແບບ ເປີດກວ້າງຢ່າງຫມັ້ນທ່ຽງ ແລະ ຢ່າງດຸນດ່ຽງ.

·ຄ. ລາຍໄດ້ແຫ່ງຊາດແລະການແຈກຢາຍລາຍໄດ້ແຫ່ງຊາດ ພາຍໃຕ້ລະບອບສັງຄົມນິຍົມ

ລາຍໄດ້ແຫ່ງຊາດ ລາຍໄດ້ແຫ່ງຊາດພາຍໃຕ້ລະບອບສັງຄົມນິຍົມແມ່ນພາກ ສ່ວນຫນຶ່ງຂອງຜະລິດຕະພັນລວມຍອດຂອງສັງຄົມ ທີ່ຍັງ ເຫລືອຢູ່ ຫລັງຈາກໄດ້ມີການທົດແທນຄືນຄ່າພາຫະນະການຜະລິດ ທີ່ໄດ້ໃຊ້ - ຈ່າຍໄປແລ້ວ ແລະ ມັນກໍ່ສະແດງເຖິງແຮງງານເປັນ ທີ່ໄດ້ມີການໃຊ້ຈ່າຍໄປ ໃນຄັ້ງໃຫມ່.

ອີງຕາມຮູບການເປັນວັດຖຸ-ສິ່ງຂອງ ຂອງມັນ ລາຍໄດ້ແຫ່ງຊາດປະກອບ ດ້ວຍພາຫະນະການຜະລິດ ທີ່ໄດ້ຜະລິດຂໍ້ນມາໃນຄັ້ງໃຫມ່ ແລະ ດ້ວຍທັງຫມົດ ມວນສານເຄື່ອງໃຊ້ສອຍທີ່ໄດ້ຜະລິດຂໍ້ນມາໃນຄັ້ງໃຫມ່. ລາຍໄດ້ແຫ່ງຊາດ -

ແມ່ນຖືກໃຊ້ເຂົ້າ: ອັນທີໜຶ່ງ, ໃນຖານະເປັນບໍ່ເກີດຂອງທຶນ ເພື່ອການຊຸມ ໃຊ້ຂອງຊາວຜູ້ອອກແຮງງານ ຢູ່ໃນຂົງເຂດການຜະລິດ ໂດຍຮັບປະກັນໃຫ້ ມີ ການຜະລິດສຳແຮງງານ; ອັນທີສອງ, ໃນຖານະເປັນບໍ່ເກີດເພື່ອເປີດ - ກວ້າງການຜະລິດ ແລະ ເພື່ອສ້າງຄວາມອາດສາມາດບໍ່ມຸ້ອນທີ່ຈຳເປັນເພື່ອ ໃຫ້ມີຂະບວນການວິວັດ ແຫ່ງການຜະລິດສຳແບບເປີດກວ້າງຂອງສັງຄົມ ຢ່າງ ລຽນຕິດ; ອັນທີສາມ, ໃນຖານະເປັນບໍ່ເກີດເພື່ອລ້ຽງດູຂົງເຂດທີ່ບໍ່ມີລັກ ສະ ນະຜະລິດ. ຍ້ອນວ່າມັນມີການຜະລິດສິນຄ້າ ຢູ່ໃນລະບອບສັງຄົມນິຍົມ ດັ່ງນັ້ນ ນອກຈາກຮູບການເປັນວັດຖຸແລ້ວ ລາຍໄດ້ແຫ່ງຊາດ ກໍ່ຍັງມີທັງຮູບການເປັນ-ຄຸນຄ່າ ແລະ ເປັນເງິນ, ລາຍໄດ້ແຫ່ງຊາດ ປະກົດຕົວອອກມາຜ່ານເງິນ , ແລະ ທັງມີການວັດແທກດ້ວຍເງິນ. ລາຍໄດ້ແຫ່ງຊາດທີ່ຄົດໄລ່ອອກມາໃນລາ ຄາສົມທຽບກັນໄດ້ນັ້ນ ໃຫ້ຊື່ວ່າເປັນບໍລິມາດ ຄົດເປັນວັດຖຸ ຂອງລາຍໄດ້ແຫ່ງ ຊາດ.

ລາຍໄດ້ແຫ່ງຊາດຂອງສັງຄົມນິຍົມ ແຕກຕ່າງກັນໂດຍພື້ນຖານ ກັບ ລາຍ ໄດ້ແຫ່ງຊາດ ຂອງສັງຄົມທຶນນິຍົມ ບໍ່ວ່າທາງດ້ານທາດແທ້ເສດຖະກິດຂອງມັນ ກໍ່ຄືທາງດ້ານບໍ່ເກີດຂອງລາຍໄດ້ແຫ່ງຊາດ, ທາງດ້ານຫລັກການໃນການແຈກ ຢາຍ ແລະ ທາງດ້ານ ລັກສະນະໃນການນຳໃຊ້ .

ພາຍໃຕ້ລະບອບທຶນນິຍົມ ລາຍໄດ້ແຫ່ງຊາດ ແມ່ນ ສ້າງຂຶ້ນ ບົນພື້ນຖານ ການຂູດຮີດນອນຊຸມຊາວຜູ້ອອກແຮງງານ ແລະ ມັນກໍ່ຕົກໄປເປັນຂອງພວກຊຸມ ຊຸມຂູດຮີດ; ໃນນີ້ພວກນາຍທຶນ ແລະ ພວກເຈົ້າທີ່ດິນ ພາກັນກອບໂກຍ,ເອົາ ພາກສ່ວນໃຫຍ່ຂອງລາຍໄດ້ແຫ່ງຊາດ ແລະ ສະເພາະພາກສ່ວນນ້ອຍຂອງມັນ ນັ້ນກໍ່ແມ່ນ ຕົກໄປເປັນຂອງຊາວຜູ້ອອກແຮງງານ.

ພາຍໃຕ້ລະບອບສັງຄົມນິຍົມ ລາຍໄດ້ແຫ່ງຊາດ ແມ່ນສ້າງຂຶ້ນດ້ວຍ ການ ອອກແຮງງານ ຂອງຊາວຜູ້ອອກແຮງງານ ຜູ້ທີ່ໄດ້ຖືກປົດປ່ອຍອອກຈາກ ການ ຂູດຮີດ. ລາຍໄດ້ແຫ່ງຊາດທັງໝົດ ເປັນກຳມະສິດຂອງຊາວຜູ້ອອກແຮງງານ ຢ່າງເຕັມສ່ວນ. ຢູ່ໃນລະບອບນີ້ ໄດ້ເກີດມີໜົດທຸກເງື່ອນໄຂ ທີ່ຈຳເປັນເພື່ອ ຮັກໃຫ້ລາຍໄດ້ແຫ່ງຊາດ ມີການເຕີບໃຫຍ່ຂະຫຍາຍຕົວຢ່າງວ່ອງໄວ ແລະ ຢ່າງເນື່ອງນິດລຽນຕິດ.ຍົກຕົວຢ່າງ, ຢູ່ ສ.ສ.ສ.ຊ ລາຍໄດ້ແຫ່ງຊາດ ທີ່ ຜະລິດຂຶ້ນມາໄດ້ໃນປີ ໑໙໓໐ ໄດ້ເພີ່ມຂຶ້ນ ໑໔,໑ ເທື່ອ ຖ້າທຽບໃສ່ປີ໑໙໔໐.

ສະເພາະປີ ໑໙໘໕ ໄດ້ມີການຂຶ້ນແຜນການ ໃຫ້ເພີ່ມທະວີລາຍໄດ້ແຫ່ງຊາດ-ຂຶ້ນ ໑໘-໘໐ % ຖ້າສົມທຽບໃສ່ປີ ໑໙໘໐ .

ພາຍໃຕ້ລະບອບສັງຄົມນິຍົມ ລາຍໄດ້ແຫ່ງຊາດ ມີການເພີ່ມທະວີຂຶ້ນ ໄດ້ກ່ອນອື່ນໝົດກໍ່ແມ່ນ ດ້ວຍວິທີການຍົກສູງສະມັດຖະພາບ ຂອງການອອກ ແຮງງານຂຶ້ນ. ການເສີມຂະຫຍາຍວິທະຍາສາດ ແລະ ວັດທະນະທຳ, ການ ສະສົມບົດຮຽນໃນການຜະລິດ, ລະດັບຄວາມຮູ້ ແລະ ລະດັບຄວາມຊຳນິຊຳນານ ຂອງຊາວຜູ້ອອກແຮງງານ ໃນສັງຄົມນິຍົມ ລ້ວນແຕ່ມີຄວາມໝາຍສຳຄັນຢ່າງ ໃຫຍ່ຫລວງ.

ຢູ່ ສ.ສ.ສ.ຍ ພາກສ່ວນໃຫຍ່ ຂອງທັງໝົດອັດຕາ ທີ່ ເພີ່ມທະວີຂຶ້ນ ຂອງລາຍໄດ້ແຫ່ງຊາດ ແມ່ນໄດ້ມາຍ້ອນວ່າ ສະມັດຖະພາບ ຂອງການອອກ-ແຮງງານ ໄດ້ມີການເຕີບໃຫຍ່ຂະຫຍາຍຕົວ. ປັດໄຈອັນນີ້ ມີລັກສະນະຕັດສິນ ຊີຂາດ ໃນການສ້າງສາລາຍໄດ້ແຫ່ງຊາດ. ສະມັດຖະພາບຂອງການອອກ - ແຮງງານ ຍິ່ງສູງເທົ່າໃດ, ບໍລິມາດຜົດເປັນວັດຖຸ ຂອງຜະລິດຕະພັນ ລວມ ຍອດ ຂອງສັງຄົມ ກໍ່ຍິ່ງຫລາຍຂຶ້ນ ແລະ ຈາກນັ້ນ ມວນສານລາຍໄດ້ແຫ່ງຊາດ ກໍ່ຍິ່ງຈະຫລາຍຂຶ້ນເທົ່ານັ້ນ.

ປັດໄຈທີ່ພາໃຫ້ລາຍໄດ້ແຫ່ງຊາດ ຂອງສັງຄົມນິຍົມ ມີການເຕີບໃຫຍ່ ຂະ ຫຍາຍຕົວ ກໍ່ຍັງຄົງແມ່ນບັນຫາການເພີ່ມຈຳນວນຊາວຜູ້ອອກແຮງງານ ທີ່ເຮັດ ວຽກຢູ່ໃນຂະແໜງການຕ່າງໆ ໃນຂົງເຂດການຜະລິດ ແຕ່ບໍ່ເກີດມີຂຶ້ນ ຈຳ ກັດ. ໃນເວລາດຽວກັນນັ້ນ ຈຳນວນຊາວຜູ້ອອກແຮງງານ ທີ່ເຮັດວຽກ ຢູ່ໃນ ຂົງເຂດ ທີ່ບໍ່ແມ່ນການຜະລິດ ຊ້ຳພັດມີການເພີ່ມຂຶ້ນຢ່າງເປັນປະຈຳ .

ລະບົບເສດຖະກິດແຫ່ງຊາດ ແບບສັງຄົມນິຍົມ ຮັບປະກັນໃຫ້ມີການນຳໃຊ້ ຊັບພະຍາກອນທາງດ້ານແຮງງານຂອງສັງຄົມຢ່າງຖືກຕ້ອງເໝາະສົມ ກວ່າ ໝູ ຍ້ອນວ່າຢູ່ພາຍໃຕ້ລະບອບສັງຄົມນິຍົມ ໄດ້ມີການລົບລ້າງໄພຂົ່ມຂູ່ງານ-ແລ້ວ ແລະກໍ່ໄດ້ມີຄວາມອາດສາມາດ ເພື່ອຈຳນຳໃຊ້ແຮງງານໄດ້ຢ່າງມີແຜນ ການ ໂດຍສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງສັງຄົມ.

ສະຫລຸບແລ້ວ ປັດໄຈແຫ່ງການເຕີບໃຫຍ່ຂະຫຍາຍຕົວ ຂອງລາຍໄດ້ແຫ່ງ ຊາດ ແມ່ນການປະຢັດພາຫະນະການຜະລິດ. ການຫລຸດຜ່ອນການໃຊ້ຈ່າຍວັດ ຖຸດິບ, ເຊື້ອເພີ້ງ ແລະ ພັດສະດຸຂ້ຳໃນການຜະລິດຫົວໜ່ວຍຜະລິດຕະພັນ,

ການນຳໃຊ້ອຸປະກອນ ແລະ ສະຖານທີ່ຜະລິດ ຢ່າງມີປະສິດທິຜົນກວ່າເກົ່າ ລ້ວນແຕ່ພາໃຫ້ເກີດມີຊັບພະຍາກອນເພີ່ມເຕີ່ມ ເພື່ອຈະເພີ່ມທະວີ ການຜະລິດ ເຄື່ອງຂອງຂັ້ນໄດ້ ແລະ ຈາກນັ້ນກໍພາໄປເຖິງບ່ອນລາຍໄດ້ແຫ່ງຊາດ ກໍ ມີ ການເພີ່ມທະວີຂັ້ນ.

ການແຈກຢາຍລາຍໄດ້ແຫ່ງຊາດ ພາຍໃຕ້ລະບອບສັງຄົມນິຍົມ ການ ແຈກ ຢາຍລາຍໄດ້ແຫ່ງຊາດ ແມ່ນດຳເນີນໄປ ຢ່າງມີແຜນການ ໂດຍແນໃສ່ໃຫ້ມີການຮັບປະກັນ ການຜະລິດສຳເປີດກວ້າງ-ແບບສັງຄົມນິຍົມ ແລະ ການເພີ່ມທະວີ ລະດັບການຢູ່ດີກິນດີຂອງປະຊາຊົນຂັ້ນ ຢ່າງບໍ່ຢຸດຢັ້ງ.

ລາຍໄດ້ແຫ່ງຊາດທີ່ສ້າງຂັ້ນມາໄດ້ ຢູ່ໃນເສດຖະກິດແຫ່ງຊາດ ປະກອບ-ດ້ວຍສອງພາກສ່ວນ. ພາກສ່ວນໜຶ່ງ ຂອງລາຍໄດ້ແຫ່ງຊາດແມ່ນ <u>ຜະລິດຕະ ພັນທີ່ຈຳເປັນ</u> ແລະ ກໍຖືກແບ່ງປັນ ລະຫວ່າງຊາວຜູ້ອອກແຮງງານ ທີ່ເຮັດ - ວຽກຢູ່ໃນຂົງເຂດການຜະລິດ ອີງຕາມຈຳນວນ ແລະ ຄຸນນະພາບການ ອອກ ແຮງງານ ຂອງພວກເຂົາເຈົ້າ. ພາກສ່ວນນັ້ນຂອງລາຍໄດ້ແຫ່ງຊາດ ມີ ຮູບ ການເປັນເງິນເດືອນເບີກຈ່າຍໃຫ້ ກຳມະກອນ ແລະ ພາລະກອນ ຢູ່ໃນລັດວິ ສາຫະກິດ ກໍ ມີຮູບການເປັນລາຍໄດ້ແບບເປັນວັດຖຸ ແລະ ເປັນເງິນ ຂອງ ພວກຊາວນາລວມໝູ.

ອີກພາກສ່ວນໜຶ່ງຂອງລາຍໄດ້ແຫ່ງຊາດ <u>ແມ່ນຜະລິດຕະພັນສ່ວນເກີນ</u> ທີ່ ຖືກໃຊ້ເຂົ້າເພື່ອເປີດກວ້າງການຜະລິດ ແລະ ສ້າງຄວາມອາດສາມາດບົ່ມ - ຊ້ອນໄວ້, ເພື່ອກໍ່ສ້າງກິດຈະການທີ່ມີເປົ້າໝາຍຮັບໃຊ້ທາງດ້ານວັດທະນະທຳ ໃນວົງປະຈຳວັນ, ເພື່ອສ້າງຄັງຂອງສັງຄົມ ເພື່ອການຈຸມໃຊ້ ແລະເພື່ອສະ ໜອງ ຄວາມຕ້ອງການຂອງສາທາລະນະຈຸມອື່ນໆ.

ໂດຍສອດຄ່ອງກັບແຜນການ ກ່ຽວກັບການເປີດກວ້າງການຜະລິດສັງຄົມນິ ຍົມ ຢູ່ໃນຕົວເມືອງ ແລະ ຈຸມນະບົດ ກໍ ເພື່ອແນໃສ່ ຕອບສະໜອງ ຄວາມ ຮຽກຮ້ອງຕ້ອງການຂອງສັງຄົມ ລັດສັງຄົມນິຍົມປະຕິບັດ ການແຈກຢາຍ ລາຍ ໄດ້ແຫ່ງຊາດຄົນໃໝ່ ຕົ້ນຕໍກໍແມ່ນຜ່ານງົບປະມານແຫ່ງລັດ. ລາຍຮັບຂອງພົນ ລະເມືອງ ຈຳພວກທີ່ອອກແຮງງານຢູ່ໃນຂົງເຂດ ທີ່ບໍ່ແມ່ນການຜະລິດ ລ້ວນ

ແຕ່ໄດ້ມາເປັນລັກສະນະ ການແຈກຢາຍລາຍໄດ້ແຫ່ງຊາດຄືນໃຫມ່ .

ລາຍໄດ້ແຫ່ງຊາດທັງຫມົດຂອງສັງຄົມນິຍົມ ປະກອບດ້ວຍຄັງເພື່ອການຊົມໃຊ້ ແລະ ຄັງເພື່ອການສະສົມ.

<u>ຄັງເພື່ອການຊົມໃຊ້</u> ແມ່ນພາກສ່ວນລາຍໄດ້ແຫ່ງຊາດ ທີ່ຖືກນຳໃຊ້ ເພື່ອຕອບສະຫນອງຄວາມຮຽກຮ້ອງຕ້ອງການຂອງພົນລະເມືອງ ກ່ຽວກັບການກິນຢູ່ການນຸ່ງຖື, ເກີບ, ເຄື່ອງຮັບໃຊ້ຊີວິດປະຈຳວັນ ແລະ ວັດທະນະທຳ ກໍ່ ຄື ເພື່ອຕອບສະຫນອງຄວາມຮຽກຮ້ອງຕ້ອງການຂອງສາທາລະນະຊົນ.ຢູ່ ສ.ສ.ສ.ຊ ມີການຈ່າຍປະມານ ๔ / ๕ ຂອງລາຍໄດ້ແຫ່ງຊາດ ເພື່ອຮັບ ໃຊ້ ເປົ້າຫມາຍດັ່ງກ່າວນີ້.

ຄັງເພື່ອການຊົມໃຊ້ ແມ່ນສ້າງຂຶ້ນມາ ຈາກແຮງງານອັນຈຳເປັນ ກໍ່ຄື ຈາກພາກສ່ວນຫນຶ່ງຂອງຜະລິດຕະພັນສ່ວນເກີນ. ອີງຕາມລັກສະນະ ໃນການນຳໃຊ້ຄັງເພື່ອການຊົມໃຊ້ ພາຍໃຕ້ລະບອບສັງຄົມນິຍົມ ອາດຈະແຍກ ອອກເປັນ ຄັງເພື່ອການເບີກຈ່າຍຕາມແຮງງານ ໃຫ້ຊາວຜູ້ອອກແຮງງານ ທີ່ ດຳເນີນການຜະລິດສັງຄົມນິຍົມ ແລະ ເປັນຄັງຂອງສັງຄົມ ເພື່ອການຊົມໃຊ້. ຄັງຂອງສັງຄົມເພື່ອການຊົມໃຊ້ ແມ່ນຖືກໃຊ້ຈ່າຍເພື່ອສະຫນອງຄວາມຕ້ອງການ-ທາງດ້ານສັງຄົມ- ວັດທະນະທຳ ຫມາຍຄວາມວ່າ ເພື່ອຮັບປະກັນຄວາມຮຽກຮ້ອງຕ້ອງການ ໃນດ້ານວິທະຍາສາດ, ດ້ານການສຶກສາ, ສາທາລະນະສຸກ, ສິລະປະກຳ ແລະ ອື່ນໆ, ດ້ານສະຫວັດດີການ (ການຊ່ວຍເຫລືອຂອງລັດຕໍ່ຜູ້ເປັນແມ່ ທີ່ມີລູກຫລາຍຄົນ ຫລືຜູ້ເປັນແມ່ ທີ່ລ້ຽງລູກ ບໍ່ມີພໍ່, ເບ້ຍບຳນານ ແລະ ອື່ນໆ), ເພື່ອທົດແທນການໃຊ້ຈ່າຍໃນວຽກງານຄຸ້ມຄອງ ແລະ ວຽກງານປ້ອງກັນຊາດ (ການລ້ຽງດູກົງຈັກຂອງລັດ ແລະ ກຳລັງປະກອບອາວຸດ ແລະ ອື່ນໆ). ຄັງຂອງສັງຄົມເພື່ອການຊົມໃຊ້ ມີຄວາມຫມາຍສຳຄັນ ເພື່ອເຮັດໃຫ້ລະດັບ ຄວາມຢູ່ດີກິນດີຂອງປະຊາຊົນ ເຕີບໃຫຍ່ຂະຫຍາຍຕົວ.

ຄັງເພື່ອການສະສົມ ແມ່ນສ້າງຂຶ້ນມາຈາກຜະລິດຕະພັນສ່ວນເກີນ. ອີງຕາມພາກສ່ວນປະກອບທາງດ້ານວັດຖຂອງມັນ ຄັງອັນນີ້ ຕົ້ນຕໍກໍ່ແມ່ນຜະລິດຕະພັນທີ່ສ້າງຂຶ້ນມາຢູ່ໃນຫມວດ ທີ ๑. ແຕ່ພາກສ່ວນຫນຶ່ງທີ່ແມ່ນອນ ຂອງຜະລິດ-ຕະພັນຫມວດ ທີ ๘ ກໍ່ມີການສະສົມໄວ້ເຊັ່ນດຽວກັນ (ການສະສົມເຄື່ອງໃຊ້ສອຍສຳລັບຊາວຜູ້ອອກແຮງງານ ທີ່ຖືກລະດົມເຂົ້າມາເຮັດວຽກໃຫມ່, ການ

ສ້າງຄວາມອາດສາມາດບີ່ມ້ອມໄວ້ ແລະ ກຳລັງແຮງສະສົມ ກ່ຽວກັບເຄື່ອງ
ໃຊ້ສອຍແລະອື່ນໆ). ຖ້າຄິດໄລ່ເປັນເງິນແລ້ວ ຄັງ ເພື່ອການສະສົມຕົ້ນ
ຕົ້ນກໍແມ່ນທຶນຮອນຂອງງົບປະມານແຫ່ງລັດ, ຂອງວິສາຫະກິດຂອງລັດ ແລະ
ຂອງມາລວມ-ສະຫະກອນ ທີ່ຖືກໃຊ້ເຂົ້າໃນການສະສົມ.ປະມານ ໑ ສ່ວນ ໕
ຂອງລາຍໄດ້ແຫ່ງຊາດ ຖືກສົ່ງເຂົ້າໄປໃນຄັງ ເພື່ອການສະສົມ.

ອີງຕາມລັກສະນະໃນການນຳໃຊ້ຄັງເພື່ອການສະສົມອາດຈະແບ່ງອອກ -
ເປັນສາມພາກສ່ວນ. ພາກສ່ວນອັນໜຶ່ງແມ່ນຖືກສົ່ງເຂົ້າໄປຮັບໃຊ້ການ ເປີດ
ກວ້າງການຜະລິດ,ອີກພາກສ່ວນໜຶ່ງແມ່ນມີເປົ້າໝາຍເພື່ອຮັບໃຊ້ການລົງທຶນ
ແລະ ການກໍ່ສ້າງກິດຈະການຮັບໃຊ້ວຽກງານວັດທະນະທຳ ໃນຊົນນະບົດ
(ໂຮງຮຽນ, ໂຮງໝໍ, ເຮືອນຢູ່ແລະອື່ນໆ). ສ່ວນພາກສ່ວນທີ່ສາມແລ້ວນັ້ນ
ກໍປະກອບໄປເປັນທຶນແຮໄວ້ ຫລື ເປັນຄັງເພື່ອປະກັນໄພ.

ອາດຈະສະແດງກ່ຽວກັບການແຈກຢາຍຜະລິດຕະພັນລວມຍອດຂອງສັງຄົມ
ແລະ ລາຍໄດ້ແຫ່ງຊາດ ດ້ວຍຕາຕະລາງດັ່ງລຸ່ມນີ້ :



ການສະສົມແບບສັງຄົມນິຍົມ ພາຍໃຕ້ລະບອບສັງຄົມນິຍົມ ບໍ່ມີການຂັດແຍ່ງ
ແບບປໍລະປັກກັນລະຫວ່າງການຜະລິດກັບການ
ຊົມໃຊ້, ລະຫວ່າງການຊົມໃຊ້ກັບການສະສົມ. ສັງຄົມສັງຄົມນິຍົມ ອີງໃສ່ຄວາມ
ອາດສາມາດໃນການປະສານສົມທົບນຳກັນລະຫວ່າງການຊົມໃຊ້ກັບການສະສົມ
ອັນນັ້ນພາໃຫ້ເກີດມີເງື່ອນໄຂເພື່ອຮັບປະກັນການຜະລິດສຳເປີດກ້ວາງດ້ວຍຈັງ
ຫວະອັນວ່ອງໄວແລະທັ່ງພາໃຫ້ມີຄວາມສາມາດຕອບສະໜອງຄວາມຮຽກຮ້ອງ
ຕ້ອງການຂອງສັງຄົມສັງຄົມນິຍົມໄດ້ ຢ່າງເຕັມສ່ວນກ່ວາເກົ່າ.

ມີການກຳນົດອັດຕາສ່ວນລະຫວ່າງການຊົມໃຊ້ ກັບ ການສະສົມ ພາຍໃຕ້
ລະບອບສັງຄົມນິຍົມ ໂດຍສອດຄ່ອງກັບໜ້າທີ່ການກໍ່ສ້າງສັງຄົມນິຍົມ ບົນ ພື້ນ
ຖານການພັດທະນາ ເສດຖະກິດແຫ່ງຊາດ ຢ່າງມີແຜນການ. ໃນນີ້ ອັດ ຕາ
ສ່ວນລະຫວ່າງການຊົມໃຊ້ ກັບ ການສະສົມ ບໍ່ອາດຈະກຳນົດ ແບບຕາຍຕົວ
ແລະ ບໍ່ມີການປ່ຽນແປງໄດ້, ມັນມີການກຳນົດອອກມາ ໂດຍສະເພາະໃນແຕ່
ລະໄລຍະ.

ການສະສົມແບບສັງຄົມນິຍົມ ແມ່ນບໍ່ເກີດຂອງການຜະລິດສຳເປີດກ້ວາງ-
ແບບສັງຄົມນິຍົມ. ໜ່ວຍພື້ນຂອງການສະສົມແບບສັງຄົມນິຍົມ ສະແດງ ອອກ
ຢູ່ບ່ອນ ຄວາມຮັ່ງມີຂອງສັງຄົມ ແລະ ທຶນການຜະລິດ ແລະ ທຶນທີ່ບໍ່ແມ່ນການ
ຜະລິດ ລ້ວນແຕ່ມີການເພີ່ມທະວີຂຶ້ນຢ່າງເປັນປະຈຳ ດ້ວຍວິທີໜູນໃຊ້ ພາກ
ສ່ວນໜຶ່ງຂອງ ຜະລິດຕະພັນສ່ວນເກີນ ຢ່າງເປັນລະບົບເຂົ້າໃນການເປີດ -
ກ້ວາງການຜະລິດ ຢ່າງເນື່ອງນິດລຽນຕິດ ເພື່ອແນໃສ່ຍົກສູງລະດັບຄວາມຢູ່ດີ
ກິນດີ ຂອງປະຊາຊົນຂຶ້ນຢ່າງບໍ່ຢຸດຢັ້ງ.

ການສະສົມແບບສັງຄົມນິຍົມ ແມ່ນດຳເນີນໄປໂດຍຜ່ານການລົງທຶນ ພື້ນ
ຖານເຂົ້າໃນເສດຖະກິດແຫ່ງຊາດ ຊຶ່ງໃນແຕ່ລະປີ ມີການເພີ່ມຂຶ້ນຢ່າງ ບໍ່ຢຸດ
ຢັ້ງ .

ມ. ລະບົບການເງິນ-ສິນເຊື່ອ ພາຍໃຕ້ລະບອບສັງຄົມນິຍົມ

ລະບົບການເງິນ-ສິນເຊື່ອ ມີບົດບາດອັນສຳຄັນຢູ່ໃນການຜະລິດສຳ ແບບ
ສັງຄົມນິຍົມ. ໜ່ວຍພຸກຂອດ ແລະ ພາກສ່ວນຕ່າງໆ ໃນລະບົບການເງິນ-ສິນ

ເຊື່ອ ລ້ວນແຕ່ມີຫນ້າທີ່ຮັບໃຊ້ການຜະລິດ, ການແຈກຢາຍ, ການແລກປ່ຽນ, ການສະສົມແລະການຊົມໃຊ້ ຜະລິດຕະພັນຂອງສັງຄົມ. ໂດຍສວຍໃຊ້ ການເງິນ ແລະ ການສິນເຊື່ອ ມັນໄດ້ມີການຮັບປະກັນ ກ່ຽວກັບ ການແຈກຢາຍ ແລະ ການນຳໃຊ້ພາກສ່ວນຫນຶ່ງອັນສຳຄັນຍິ່ງ ຂອງຜະລິດຕະພັນຂອງສັງຄົມຄື ລາຍໄດ້ແຫ່ງຊາດ. ຜ່ານການເງິນ ແລະ ສິນເຊື່ອ ລັດສັງຄົມນິຍົມ ມີການ-ກະທົບຢ່າງຕັ້ງຫນ້າໃສ່ການເຄື່ອນໄຫວເສດຖະກິດ ຂອງວິສາຫະກິດແຕ່ ລະບ່ອນ ໂດຍສ້າງເງື່ອນໄຂ ເພື່ອໃຫ້ຄົ້ນພົບ ຄວາມອາດສາມາດບົ່ມຊ້ອນ ໄວ້ຢ່າງເຕັມສ່ວນກວ່າເກົ່າ ແລະ ເພື່ອໃຫ້ໃຊ້ຈ່າຍ ພາຫະນະທຶນຮອນທີ່ມີຢູ່ແລ້ວນັ້ນຢ່າງປະຢັດ.

ງົບປະມານແຫ່ງລັດ ລາຍໄດ້ແຫ່ງຊາດ ແມ່ນສ້າງຂຶ້ນຢູ່ໃນຂະແຫນງການ ຕ່າງໆ ຂອງການຜະລິດ (ຢູ່ໃນວິສາຫະກິດ) ພາກສ່ວນໃຫຍ່ຂອງລາຍໄດ້ແຫ່ງຊາດ ແມ່ນຖືກສົ່ງເຂົ້າໄປໃນຄັງເພື່ອການ ສະສົມ ຫມາຍຄວາມວ່າ ຖືກນຳໃຊ້ເພື່ອສືບຕໍ່ເປີດກວ້າງການຜະລິດ.

ແຕ່ຖ້າຫາກວ່າ ບັນດາວິສາຫະກິດ ພາກັນນຳໃຊ້ ພາກສ່ວນອັນນີ້ ຂອງ ລາຍໄດ້ແຫ່ງຊາດ ພໍໃຜພໍລາວເອົາເອງ ,ແບບໂດຍກົງ ຫລື ທາງອ້ອມ ເພື່ອ ເປີດກວ້າງການຜະລິດ ຂອງຕົນເອງນັ້ນ ມັນກໍ່ບໍ່ອາດຈະສາມາດຮັບປະກັນໃຫ້ ມີອັດຕງສ່ວນອັນຖືກຕ້ອງໄດ້ ໃນພາກການເສີມຂະຫຍາຍ ບາງວິສາຫະກິດ - ແລະ ຂະແຫນງການໃດຫນຶ່ງສະເພາະໃນເສດຖະກິດແຫ່ງຊາດ. ຍ້ອນ ແນວ ນີ້ມັນຈົ່ງມີການສ້າງຄັງລວມສູນເພື່ອການສະສົມ ຢູ່ໃນເສດຖະກິດສັງຄົມນິຍົມ. ຄັງດັ່ງກ່າວຖືກນຳໃຊ້ເປັນບໍ່ເກີດຂອງການລົງທຶນ ເພື່ອກໍ່ສ້າງ ວິສາຫະກິດ ບ່ອນໃຫມ່, ເພື່ອກໍ່ສ້າງຄືນໃຫມ່ ແລະ ຂະຫຍາຍວິສາຫະກິດ ທີ່ພວມມີການ-ເຄື່ອນໄຫວ.

ຄັງລວມສູນເພື່ອການສະສົມ ແມ່ນເຕົ້າໂຮມຢູ່ໃນງົບປະມານແຫ່ງລັດ ທີ່ ເປັນຂອດນຳຫນ້າຢູ່ໃນລະບົບການເງິນຂອງລັດສັງຄົມນິຍົມ. ງົບປະມານແຫ່ງ ລັດ ແມ່ນແຜນການການເງິນອັນພື້ນຖານຂອງປະເທດ, ໂດຍຜ່ານແຜນ ການ ອັນນີ້ ມັນມີການເຕົ້າໂຮມ ແລະ ມີການນຳໃຊ້ພາກສ່ວນໃຫຍ່ຂອງລາຍໄດ້ - ແຫ່ງຊາດ ເພື່ອຕອບສະຫນອງ ຄວາມຕ້ອງການ ສາທາລະນະຊົນ. ການຂຶ້ນ

ງົບປະມານແຫ່ງລັດ ປະຕິບັດໄປ ໂດຍສອດຄ່ອງກັບ ແຜນການພັດທະນາເສດ ຖະກິດແຫ່ງຊາດ.

ງົບປະມານແຫ່ງລັດ ປະກອບດ້ວຍພາກສ່ວນລາຍຮັບ ແລະ ລາຍຈ່າຍ.

ບໍ່ເກີດພື້ນຖານຂອງ<u>ພາກສ່ວນລາຍຮັບຂອງງົບປະມານແຫ່ງລັດ</u> ແມ່ນ ໄດ້ ມາຈາກວິສາຫະກິດສັງຄົມນິຍົມ. ໃນນັ້ນ: ອາກອນຕົວເລກ, ການຫັກເອົາ ຈາກກຳໄລຂອງວິສາຫະກິດ ແລະ ອົງການຈັດຕັ້ງເສດຖະກິດອື່ນໆ, ການຫົດ ແທນທຶນພື້ນຖານແຫ່ງການຜະລິດ ແລະ ທຶນໝູນວຽນຕາມກຳນົດໝາຍ, ການ ໂອນສ່ວນເສດເຫລືອຂອງກຳໄລ ທີ່ບໍ່ຖືກນຳໃຊ້, ການໂອນເງິນອັດຕາ ທີ່ຄົງ ຕົວ (ຄ່າເຊົ່າ) ອາກອນລາຍໄດ້ຈາກບັນດາສະຫະກອນ ແລະ ນາ ລວມ ລາຍຮັບຈາກປ່າໄມ້ ແລະ ອື່ນໆ. ພາກສ່ວນເສດຖະກິດສັງຄົມນິຍົມຢູ່ ສ.ສ. ສ.ຊ ມີການປະກອບຫລາຍກວ່າ ໙໑% ເຂົ້າໃນລາຍຮັບຂອງງົບປະ ມານ ແຫ່ງລັດ. ນັບເຂົ້າຢູ່ໃນພາກສ່ວນລາຍຮັບ ຂອງງົບປະມານແຫ່ງລັດ ກໍ່ຍັງ ມີ ທັງລັວເພື່ອການປະກັນໄພທາງສັງຄົມ. ບັນດາອົງການຈັດຕັ້ງ ແລະ ວິສາຫະ ກິດຂອງລັດ ປະຕິບັດການໂອນເງິນ ໃນອັດຕາທີ່ແນ່ນອນ ເຂົ້າໃນລັວດັ່ງກ່າວ ພາຍໃຕ້ຮູບການເປັນອັດຕາພິເສດທີ່ຄິດໄລ່ເພີ່ມໃສ່ເງິນເດືອນ.

ລັກສະນະສະເພາະອັນເດັ່ນຊັດ ຂອງງົບປະມານແຫ່ງລັດຂອງ ສ.ສ.ສ. ຊ ແມ່ນຢູ່ບ່ອນວ່າ ລາຍຮັບທີ່ມາຈາກປະຊາຊົນ ມີອັດຕາສ່ວນບໍ່ສູງ ຢູ່ໃນ-ງົບປະມານແຫ່ງລັດ. ຢູ່ໃນງົບປະມານຂອງ ສ.ສ.ສ.ຊ ອາກອນເກັບຈາກ ປະຊາຊົນ ມີແຕ່ ๗% ຂອງລາຍຮັບທັງໝົດຂອງງົບປະມານ.

<u>ພາກສ່ວນລາຍຈ່າຍຂອງງົບປະມານແຫ່ງລັດ</u> ແມ່ນຖືກສົ່ງໄປຮັບໃຊ້ ການ ລົງທຶນເຂົ້າໃນເສດຖະກິດແຫ່ງຊາດ, ໃນວຽກງານທາງດ້ານສັງຄົມ-ວັດທະ-ນະທຳ ແລະ ວິທະຍາສາດ, ໃນການລ້ຽງດູອົງການຊຸ້ມຄອງລັດ ແລະ ໃນ ວຽກງານປ້ອງກັນຊາດ. ສ.ສ.ສ.ຊ ດຳເນີນນະໂຍບາຍສັນຕິພາບຢ່າງສະ ເໝີຕົ້ນສະເໝີປາຍ, ຍ້ອນແນວນັ້ນລາຍຈ່າຍເຂົ້າໃນວຽກງານ ປ້ອງກັນຊາດ ຈຶ່ງກວມອັດຕາສ່ວນບໍ່ສູງປານໃດຢູ່ໃນງົບປະມານ.

ງົບປະມານແຫ່ງລັດຢູ່ໃນສັງຄົມ ສັງຄົມນິຍົມ ມີການເພີ່ມຂຶ້ນຢ່າງເປັນລະບົບ ບົນພື້ນຖານການຍູ້ຫນູນເສດຖະກິດແຫ່ງຊາດທັງຫມົດຂຶ້ນ ຢ່າງບໍ່ຢຸດຢັ້ງ . ງົບປະມານຂອງ ສ.ສ.ສ.ຊ. ໄດ້ຮັບການປະຕິບັດຢ່າງເປັນປະຈຳ ໂດຍ ມີລາຍຮັບລົ້ນລາຍຈ່າຍ.

ຫມົດທຸກອົງການຂອງອຳນາດການປົກຄອງໂຊວຽດ ເລີ່ມແຕ່ສະພາໂຊ - ວຽດສູງສຸດແຫ່ງ ສ.ສ.ສ.ຊ ຈົນຮອດສະພາໂຊວຽດ ຜູ້ແທນປະຊາຊົນຢູ່ຊົນນະບົດ ລ້ວນແຕ່ມີງົບປະມານສະເພາະຂອງໃຜລາວ. ອັນນີ້ເປັນການຊ່ວຍ-ໃຫ້ສາມາດຄຳນຶງເຖິງຈຸດພິເສດສະເພາະຂອງແຕ່ລະເຂດໄດ້ ຜ່ານຈາກການ ຈັດແຫ່ງການປະຕິບັດແຜນການແຫ່ງລັດ.

ການສົ່ມເຊື່ອແລະທະນາຄານ ພາຍໃຕ້ລະບອບສັງຄົມນິຍົມ

<u>ພາຍໃຕ້ລະບອບສັງຄົມນິຍົມ ການສົ່ມ ເຊື່ອ</u> ແມ່ນຮູບການທີ່ລັດນຳໃຊ້ເຂົ້າເພື່ອປຸກ ລະດົມທຶນຮອນ ທີ່ເປົ່າຫວ່າງໃນຊົ່ວຄາວແລະ ນຳໃຊ້ມັນຢ່າງມີແຜນການ ເພື່ອຕອບສະຫນອງຄວາມຮຽກຮ້ອງຕ້ອງການຂອງ ເສດຖະກິດແຫ່ງຊາດ.

ການສົ່ມເຊື່ອຕິດພັນຢ່າງສະນິດແຫນ້ນກັບຮອບຫມຸນວຽນພາຫະນະທຶນຮອນ ຂອງວິສາຫະກິດສັງຄົມນິຍົມ. ຜ່ານການຈັດແຫ່ງຮອບຫມຸນວຽນດັ່ງກ່າວຢູ່ໃນ ວິສາຫະກິດ ໄດ້ເກີດມີກ້ອນເງິນທີ່ເປົ່າຫວ່າງ ໃນໄລຍະຊົ່ວຄາວ. ສິ່ງດັ່ງ - ກ່າວ ພົວພັນກັບບັນຫາທີ່ວ່າ ເວລາເກັບຄ່າຈຳຫນ່າຍຜະລິດຕະພັນເຂົ້າວິສາ-ຫະກິດຄົບກຳນົດກັບເວລາວິສາຫະກິດໃຊ້ຈ່າຍເງິນ ເພື່ອໄປຮັບໃຊ້ ຄວາມ ຕ້ອງການ ຂອງການຜະລິດ. ຜ່ານການຈຳຫນ່າຍຜະລິດຕະພັນເທື່ອໃດບັນດາ ວິສາຫະກິດ ແລະ ອົງການຈັດຕັ້ງເສດຖະກິດກໍມີການສະສົມທຶນຮອນໄວ້ໃນບັນ ຊີຂອງຕົນ ຢູ່ທະນາຄານແຫ່ງລັດ,ທຶນຮອນດັ່ງກ່າວນີ້ ລ້ວນແຕ່ຖືກໃຊ້ຈ່າຍຜ່ານ ໄລຍະໃດຫນຶ່ງ ໂດຍສະເພາະ ການທີ່ລາຍຮັບຂອງຊາວຜູ້ອອກແຮງງານ ມີ ການເພີ່ມທະວີຂຶ້ນນັ້ນ ແມ່ນໄປພ້ອມໆກັນກັບການເກີດມີ ພາຫະນະທຶນຮອນ - ເປົ່າຫວ່າງ ເປັນຈຳນວນຫລວງຫລາຍ ທີ່ຖືກດຶງດູດໃຫ້ມີການໄປຝາກເງິນໄວ້ ໃນຄັງເງິນຝາກປະຢັດ.

ໃນເວລາທີ່ວິສາຫະກິດ ແລະ ອົງການຈັດຕັ້ງເສດຖະກິດຍ່ອມໃດຫນຶ່ງ -

ຫາກມີກ້ອນເງິນເປົ່າຫວ່າງ ໃນເວລາດຽວກັນນັ້ນ ຢູ່ໃນອົງສາທະກິດ ແລະອົງ ການຈັດຕັ້ງ ເສດຖະກິດບ່ອນອື່ນ ຊຳພັດເກີດມີຄວາມຕ້ອງການ ເງິນ ເພີ່ມ ເຕີມໃນໄລຍະຊົ່ວຄາວ. ບັນດາອົງສາທະກິດ ແລະ ອົງການຈັດຕັ້ງ ດັ່ງກ່າວ ອາດມີຄວາມຕ້ອງການ ເງິນ ເພີ່ມເຕີມນີ້ ຍົກຕົວຢ່າງກໍ່ແມ່ນເພື່ອ ກະກຽມ ວັດຖຸດິບສະສົມໄວ້ປະຈຳລະດູ, ເພື່ອສ້າງຄັງສະສົມໄວ້ໃນການຜະລິດ, ເພື່ອ ໃຊ້ຈ່າຍເຂົ້າໃນການຜະລິດ ແລະ ການຊົມໃຊ້ສິ່ງຜະລິດຕະພັນສຳເລັດຮູບ ແລະ ອື່ນໆ.

ທະນາຄານລ້ວນແຕ່ມີການລວມສູນເງິນທັງຫມົດ ທີ່ເປົ່າຫວ່າງໃນ ຊົ່ວ ຄາວ ຢູ່ໃນເສດຖະກິດແຫ່ງຊາດ ແລະ ໂດຍໃຊ້ເງິນ ດັ່ງກ່າວນີ້ ທະນາ ຄານກໍ່ມີການສະໜອງສິນເຊື່ອ ໃຫ້ບັນດາອົງການຈັດຕັ້ງເສດຖະກິດ ແລະ ອົ ສາທະກິດ ທີ່ມີຄວາມຕ້ອງການທຶນຮອນ.

ການສິນເຊື່ອມີປະເພດໄລຍະສັ້ນ ແລະ ປະເພດໄລຍະຍາວນານ.

<u>ເງິນສິນເຊື່ອໄລຍະສັ້ນ</u> ແມ່ນການເງິນສິນເຊື່ອທີ່ໃຫ້ການກູ້ຢືມໃນໄລ ຍະ ສັ້ນ ຕາມທຳມະດາກໍ່ແມ່ນຮອດປີໜຶ່ງ. ສູນກາງເອກະພາບບ່ອນໃຫ້ສິນ ເຊື່ອ ໄລຍະສັ້ນຢູ່ ສ.ສ.ສ.ຊ ກໍ່ແມ່ນທະນາຄານແຫ່ງລັດ. ເພື່ມີການໃຫ້ ສິນ ເຊື່ອໃນໄລຍະສັ້ນແກ່ອົງສາທະກິດ ແລະ ບັນດາອົງການຈັດຕັ້ງເສດຖະກິດເພື່ອ ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງພວກເຂົາເຈົ້າກ່ຽວກັບທຶນ ໝຸນ ວຽນໃນໄລຍະຊົ່ວຄາວ.

<u>ເງິນສິນເຊື່ອໄລຍະຍາວນານ</u> ແມ່ນເງິນສິນເຊື່ອທີ່ໃຊ້ກູ້ຢືມໃນໄລຍະ ເວ ລາຍາວນານ ແລະ ຖືກນຳໃຊ້ເຂົ້າໃນການກໍ່ສ້າງພື້ນຖານເປັນຕົ້ນຕໍ ຢູ່ - ສ.ສ.ສ.ຊ ໃນປະຈຸບັນ ແມ່ນທະນາຄານ ເພື່ອສະໜອງເງິນທຶນຂັ້ນທົ່ວສະ ຫະພາບ (ທະນາຄານລົງທຶນກໍ່ສ້າງຂອງ ສ.ສ.ສ.ຊ) ທີ່ເປັນຜູ້ສະໜອງ ສິນເຊື່ອໄລຍະຍາວນານ. ມີການສະໜອງສິນເຊື່ອໄລຍະຍາວນານເພື່ອການ ກໍ່ສ້າງພື້ນຖານ , ເພື່ອພັດທະນາການລ້ຽງສັດ, ເພື່ອກໍ່ສ້າງເຮືອນຢູ່ໃຫ້ສ່ວນ ຕົວບຸກຄົນ, ເພື່ອເພີ່ມທະວີການຜະລິດສິນຄ້າໃຊ້ສອຍ, ເພື່ອປັບປຸງການ ບໍລິ ການປະຊາຊົນໃຫ້ດີຂຶ້ນກວ່າເກົ່າ ແລະ ອື່ນໆ. ທະນາຄານແຫ່ງລັດຂອງ - ສ.ສ.ສ.ຊ ກໍ່ສະໜອງສິນເຊື່ອ ເພື່ອການລົງທຶນພື້ນຖານໃຫ້ແກ່ລັດວິສາຫະ ກິດຊັ້ນດຽວກັນ. ທະນາຄານແຫ່ງລັດ ເປັນຜູ້ສະໜອງສິນເຊື່ອ ໃນກໍລະນີ

ການລົງທຶນທີ່ມີຄວາມອາດສາມາດເກັບຄືນໄດ້ ໃນໄລຍະອັນໄວ. ນັບເຂົ້າ ຢູ່ໃນປະເພດສິນເຊື່ອດັ່ງກ່າວ ກໍ່ມີສິນເຊື່ອເພື່ອໃຊ້ຈ່າຍເຂົ້າ ໃນການນຳໃຊ້ - ເຕັກນິກອັນໃຫມ່ ເຂົ້າໃນການຜະລິດ ແລະ ສິນເຊື່ອເພື່ອຮັບໃຊ້ວຽກງານຈັດຕັ້ງ ແລະ ເປີດກວ້າງການຜະລິດສິນຄ້າໃຊ້ສອຍສຳລັບປະຊາຊົນ. ທະນາ - ຄານແຫ່ງລັດຂອງ ສ.ສ.ສ.ຊ ຍັງໃຫ້ສິນເຊື່ອໃນໄລຍະຍາວນານແກ່ ຕ່າງປະເທດອີກ ແລະ ກ່ອນອື່ນຫມົດກໍ່ແມ່ນບັນດາປະເທດ ສັງຄົມນິຍົມ ພາຍ ໃຕ້ເງື່ອນໄຂແບບ ນະໂຍບາຍ ແລະ ແບບຕ່າງຝ່າຍຕ່າງມີຜົນປະໂຫຍດ.

ບັນດາສະຖາບັນສິນເຊື່ອ ມີການຫັກເອົາດອກເບ້ຍໃນອັດຕາອັນແນ່ ນອນສຳລັບສິນເຊື່ອທີ່ໄດ້ໃຫ້ກູ້ຢືມໄປນັ້ນ, ກໍ່ຄືມີການຈ່າຍຄ່າດອກເບ້ຍໃນອັດ ຕາອັນແນ່ນອນສຳລັບຄ່າຝາກເງິນອັດຕາຫລຸດລົ່ນກັນ ລະຫວ່າງຄ່າດອກເບ້ຍທີ່ໄດ້ຮັບເຂົ້າມາ ກັບ ຄ່າດອກເບ້ຍທີ່ໄດ້ຈ່າຍອອກໄປ ປະກອບເປັນກຳໄລຂອງທະນາຄານ. ກຳໄລຂອງທະນາຄານ ແມ່ນພາກສ່ວນຫນຶ່ງ ຂອງ ລາຍໄດ້ສົດ ຂອງສັງຄົມ ສັງຄົມນິຍົມ.

ສິນເຊື່ອພາຍໃຕ້ລະບອບສັງຄົມນິຍົມ ສ້າງເງື່ອນໄຂເພື່ອໃຫ້ນຳໃຊ້ພາຫະນະທຶນຮອນ ຂອງວິສາຫະກິດໄດ້ຢ່າງຖືກຕ້ອງເຫມາະສົມ, ເຮັດໃຫ້ການ ຜະລິດສັງຄົມນິຍົມເຕີບໃຫຍ່ຂະຫຍາຍຕົວ ແລະ ມີຜົນກຳໄລສູງຂຶ້ນຢູ່ເລື້ອຍໆ. ມີການປະຕິບັດການແຈກຢາຍທຶນຮອນທີ່ເປົ່າຫວ່າງໃນຊົ່ວຄາວຄືນໃຫມ່ລະຫວ່າງ ຂະແຫນງການຜະລິດວິສາຫະກິດຕ່າງໆ ຢູ່ໃນເສດຖະກິດສັງຄົມນິຍົມ ໂດຍ - ຜ່ານລະບົບສິນເຊື່ອ-ທະນາຄານອັນກວ້າງຂວາງ.

ໃນເງື່ອນໄຂຂອງສັງຄົມນິຍົມຂະຫຍາຍຕົວ ໄດ້ເກີດມີຄວາມຈຳເປັນ ທີ່ຈະຕ້ອງເປີດກວ້າງການພົວພັນທາງດ້ານສິນເຊື່ອ, ປ່ຽນລະບົບການລົງທຶນ - ແບບບໍ່ມີການທົດແທນຄືນ ດ້ວຍລະບົບການໃຫ້ສິນເຊື່ອ ໃນໄລຍະເວລາອັນແນ່ນອນ ໂດຍມີການທົດແທນຄືນ. ການສືບຕໍ່ເສີມຂະຫຍາຍການພົວພັນລະຫວ່າງ ວິສາຫະກິດ (ສະຫະບໍລິສັດ) ກັບທະນາຄານ, ບົນພື້ນຖານຫລັກການ ການ ເຄື່ອນໄຫວເສດຖະກິດແບບກຸ້ມຕົນເອງ ແລະ ມີຜົນກຳໄລ, ການປັບປຸງ ພື້ນ ຖານທາງດ້ານການເງິນ ຂອງວິສາຫະກິດທັງຫມົດເຫລົ່ານີ້ ລ້ວນແຕ່ເປັນ ປັດ ໄຈ ທີ່ພາໃຫ້ໄປເຖິງບ່ອນທີ່ໄດ້ເວົ້າມານີ້.

ລະບົບສິນເຊື່ອ-ທະນາຄານຂອງ ສ.ສ.ສ.ຊ ປະກອບດ້ວຍ, ๑) ທະ

ນາຄານແຫ່ງລັດ, ๔) ທະນາຄານເພື່ອສະໜອງເງິນທຶນຂັ້ນທ້ອສະຫະພາບ (ທະນາຄານເພື່ອການລົງທຶນກໍ່ສ້າງຂອງ ສ.ສ.ສ.ຊ), ๕) ທະນາຄານການຄ້າຕ່າງປະເທດຂອງ ສ.ສ.ສ.ຊ ແລະ ๔) ຄັງເງິນຝາກປະຢັດຂອງລັດ.

ທະນາຄານແຫ່ງລັດມີບົດບາດນຳໜ້າຢູ່ໃນລະບົບສິນເຊື່ອ-ທະນາຄານ . ທະນາຄານແຫ່ງລັດ ແມ່ນທະນາຄານຕົ້ນຕໍ ທີ່ສະໜອງສິນເຊື່ອໄລຍະສັ້ນຢູ່ໃນ ເສດຖະກິດແຫ່ງຊາດ, ມັນເປັນສູນກາງບ່ອນໄລ່ລຽງ ແລະ ບ່ອນຮັບ ແລະ ເບີກຈ່າຍຂອງປະເທດ. ອົງການຈັດຕັ້ງແລະສະຖາບັນເສດຖະກິດ ປະຕິບັດ ການໄລ່ລຽງທຸກໆອັນນຳກັນ ຜ່ານທະນາຄານແຫ່ງລັດ. ຜ່ານທະນາຄານແຫ່ງ ລັດ ໄດ້ມີການປະຕິບັດ ການໂອນເງິນເຂົ້າງົບປະມານ ກໍ່ຄືການປະຕິບັດການ ໄລ່ລຽງນຳກັນລະຫວ່າງ ສະຖາບັນ ແລະ ອົງການຈັດຕັ້ງຕ່າງໆ ກັບ ປະຊາ ຊົນ. ທະນາຄານແຫ່ງລັດມີບົດບາດເປັນສູນກາງເອກະພາບບ່ອນພົ້ມເງິນບ່ອນ ດຽວ: ມັນມີໜ້າທີ່ພົ້ມເງິນເຂົ້າຮັບໃຊ້ ໃນການຈ່ລະຈອນ, ມີໜ້າທີ່ຂົ້ນແຜນ ການ ແລະ ຊຸ້ມຄອງຂັ້ນຊາການຈ່ລະຈອນເງິນຕາ. ສຸດທ້າຍທະນາຄານອັນນີ້ ກໍ່ເປັນທັງສູນກາງບ່ອນລວມສູນເງິນຕາຕ່າງປະເທດເອກະພາບບ່ອນດຽວອີກ. ມັນເປັນບ່ອນປະຕິບັດການໄລ່ລຽງກັບສາກົນ.

ທະນາຄານແຫ່ງລັດຂອງ ສ.ສ.ສ.ຊ. ແມ່ນທະນາຄານທີ່ໃຫຍ່ກວ່າໝູ່ ໃນໂລກ. ມັນມີສຳນັກງານເປັນຈຳນວນຫລາຍກວ່າ ๗๐๐๐ ແຫ່ງ ຂັ້ນ ສາ ທາລະນະລັດ, ຂັ້ນເຂດ, ຂັ້ນແຂວງ, ຂັ້ນເມືອງ, ສາຂາຢູ່ຕາມຊຸ້ມ ແລະ ບ່ອນຮັບເງິນ ທີ່ປະຕິບັດວຽກງ່ານໄລ່ລຽງ ແລະ ສິນເຊື່ອເປັນຈຳນວນຫລວງ ຫລາຍທີ່ສຸດ.

ທະນາຄານເພື່ອສະໜອງເງິນທຶນ ຂັ້ນທ້ອສະຫະພາບແຫ່ງ ສ.ສ.ສ.ຊ (ທະນາຄານລົງທຶນກໍ່ສ້າງ) ປະຕິບັດການລົງທຶນ ແລະ ການສະໜອງ ສິນ ເຊື່ອໄລຍະຍາວນານ ໃຫ້ແກ່ບັນດາວິສາຫະກິດ ເພື່ອກໍ່ສ້າງພື້ນຖານ ກໍ່ຄື ສະ ໜອງສິນເຊື່ອ ໄລຍະສັ້ນໃຫ້ແກ່ບັນດາອົງການຈັດຕັ້ງຮັບເໝົ້າກໍ່ສ້າງ,ມັນຮັບ ໃຊ້ການໄລ່ລຽງນຳກັນ ລະຫວ່າງຜູ້ສົ່ງກັບຜູ້ຮັບເໝົ້າ. ທະນາຄານລົງທຶນ ກໍ່ ສ້າງ ເຊັ່ນດຽວກັນກັບທະນາຄານແຫ່ງລັດ ຮັກໜ້າທີ່ຕິດຕາມກວດກາ ການ ປະຕິບັດ ແຜນການດຳເນີນວຽກງານກໍ່ສ້າງ, ການນຳໃຊ້ພາຫະນະທຶນຮອນ-

ໃຫ້ຖືກຕ້ອງ ແລະ ການຫລຸດຜ່ອນຄ່າກໍ່ສ້າງ.

ທະນາຄານການຄ້າຕ່າງປະເທດຂອງ ສ.ສ.ສ.ຊ ເຮັດໜ້າທີ່ສະ - ໜອງສິນເຊື່ອໃຫ້ການຄ້າຕ່າງປະເທດຂອງ ສ.ສ.ສ.ຊ ປະຕິບັດໜຸກ ວຽກ ງານ ທີ່ພົວພັນກັບເງິນຕາຕ່າງປະເທດ, ປະຕິບັດການໄລ່ລ່ຽງຄ່າ ຂາອອກ ແລະ ຂາເຂົ້າ ແລະ ຄ່າບໍລິການ ກໍ່ຄືປະຕິບັດການໄລ່ລ່ຽງອື່ນໆ. ດ້ວຍການ ເຄື່ອນໄຫວທັງໝົດຂອງມັນ ທະນາຄານການຄ້າຕ່າງປະເທດຂອງ ສ.ສ.ສ. ຊ ສ້າງເງື່ອນໄຂເພື່ອເສີມຂະຫຍາຍ ສາຍພົວພັນທາງດ້ານການຄ້າ ແລະ ດ້ານເສດຖະກິດອື່ນໆ ລະຫວ່າງ ສ.ສ.ສ.ຊ ກັບຕ່າງປະເທດ ກໍ່ຄື ເພື່ອ ເສີມຂະຫຍາຍການຄ້າພາຍໃນ ແລະ ອຸດສາຫະກຳທີ່ມີສ່ວນພົວພັນ ກັບ ການ ສົ່ງສິນຄ້າອອກ ແລະ ການສັ່ງສິນຄ້າເຂົ້າມາ.

ນອກຈາກທະນາຄານແລ້ວ ຄັງເງິນຝາກປະຢັດ ກໍ່ເຮັດໜ້າທີ່ເປັນອົງ - ການຈັດຕັ້ງສິນເຊື່ອເຊັ່ນດຽວກັນ. ຄັງເງິນຝາກປະຢັດຂອງລັດ ເປັນ ຜູ້ ຮັບ ເງິນຝາກນຳປະຊາຊົນ, ນາລວມ ແລະ ອົງການຈັດຕັ້ງມະຫາຊົນ. ນອກ ນັ້ນ ຄັງດ່ວກ່າວກໍ່ຍັງເຮັດໜ້າທີ່ຮັບໃຊ້ບໍລິການປະຊາຊົນ ໃນດ້ານວຽກງານທີ່ ພົວພັນກັບຫວຍພັດທະນາຂອງລັດ, ກັບຊັກຝາກເງິນ ແລະ ວຽກງານ ຮັບ ແລະ ເບີກຈ່າຍອື່ນໆ. ເງິນ ທີ່ບຸກຄົນນຳໃຊ້ ໃນຊົ່ວຄາວ ຂອງກຳມະກອນ, ພາລະກອນ ແລະ ຊາວນາ ຊຶ່ງໄດ້ມີການລະດົມໃຫ້ເອົາມາຝາກຄັງເງິນຝາກ ປະຢັດນັ້ນ ລ້ວນແຕ່ຖືກນຳໃຊ້ເຂົ້າໃນການລົງທຶນ ກໍ່ສ້າງສັງຄົມນິຍົມ.ຄັງເງິນ ຝາກປະຢັດຈ່າຍດອກເບ້ຍໃຫ້ເຈົ້າຂອງເງິນຝາກ ເພື່ອຕອບແທນ ຄ່າເອົາ ເງິນຂອງພວກເຂົາເຈົ້າໄປໝູນໃຊ້.

ຢູ່ໃນສັງຄົມ ສັງຄົມນິຍົມ ການເພີ່ມທະວີຂຶ້ນ ຢ່າງບໍ່ຢຸດຢັ້ງ ຂອງລະດັບຊີ ວິດການເປັນຢູ່ທາງດ້ານວັດຖຸຂອງປະຊາຊົນ ໄດ້ເຮັດໃຫ້ວຽກງານຝາກ ເງິນ ປະຢັດ ໄດ້ຮັບການເສີມຂະຫຍາຍຢ່າງຫລວງຫລາຍ. ຍົກຕົວຢ່າງ, ໃນ ປີ ໑໙໖໐ ຢູ່ ສ.ສ.ສ.ຊ ເງິນຝາກຂອງປະຊາຊົນ ຢູ່ໃນຄັງເງິນຝາກປະຢັດ ໄດ້ມີຮອດປະມານ ໑໕ພ,໔ ຕຣຸບ ໃນເວລາທີ່ໃນປີ ໑໙໔໐ ໄດ້ມີ ພຽງ ແຕ່ ๐,ກ ຕຣຸບ.

ຄຳຖາມເພື່ອທວນຄືນ

๑. ທາດແທ້ເນື້ອໃນຂອງການຜະລິດສຳແບບສັງຄົມນິຍົມມີຫຍັງແດ່ ?
๒. ຜະລິດຕະພັນລວມຍອດຂອງສັງຄົມ ປະກອບດ້ວຍພາກສ່ວນໃດແດ່ ທາງ ດ້ານຊຸມຄ່າ ແລະ ດ້ານຮູບການເປັນວັດຖຸ ?
๓. ມີປັດໄຈອັນໃດແດ່ ທີ່ພາໃຫ້ຜະລິດຕະພັນລວມຍອດ ຂອງສັງຄົມແລະລາຍ ໄດ້ແຫ່ງຊາດ ມີການເຕີບໃຫຍ່ຂະຫຍາຍຕົວ ?
๔. ເປັນຫຍັງຈຶ່ງມີຄວາມຈຳເປັນ ເພີ່ມທະວີການຜະລິດພາຫະນະການຜະລິດ ເປັນຈຸດໜັກ ?
๕. ລາຍໄດ້ແຫ່ງຊາດ ແລະ ການແຈກຢາຍລາຍໄດ້ແຫ່ງຊາດ ພາຍໃຕ້ ລະ ບອບສັງຄົມນິຍົມ.
๖. ການເງິນ ແລະ ສິນເຊື່ອ ມີບົດບາດແນວໃດ ຢູ່ໃນການຜະລິດສຳ ແບບ ສັງຄົມນິຍົມ ?
๗. ງົບປະມານແຫ່ງລັດແມ່ນຫຍັງ ? ມັນມີບໍ່ເກີດ ແລະ ລາຍຮັບອັນ ໃດ ແດ່ ?
๘. ມີການໃຊ້ຈ່າຍພາຫະນະຫົມຣອມ ຂອງງົບປະມານແຫ່ງລັດເພື່ອຮັບ ໃຊ້ ເປົ້າໝາຍອັນໃດແດ່ ?
๙. ສິນເຊື່ອແມ່ນຫຍັງ ແລະ ດ້ວຍເຫດໃດຈຶ່ງມີຄວາມຈຳເປັນ ຢູ່ໃນລະບອບ ສັງຄົມນິຍົມ ?
๑๐. ມີສິນເຊື່ອປະເພດໃດແດ່ ?
๑๑. ທະນາຄານຢູ່ໃນລະບອບສັງຄົມນິຍົມ ແລະ ພາລະໜ້າທີ່ຂອງມັນ.

ພາກ ສິບເຈັດ

ລະບົບສັງຄົມນິຍົມແຫ່ງໂລກ

๑. ການກຳເນີດເກີດຂຶ້ນແລະການຂະຫຍາຍຕົວ ຂອງລະບົບສັງຄົມນິຍົມແຫ່ງໂລກ

ເນື່ອໃນພື້ນຖານ ແລະ ຂົດໝາຍອັນຕົ້ນຕໍ ຂອງຍຸກສະໄໝປະຈຸບັນ ກໍ່ຄື ການກ້າວຂ້ຶນຈາກທຶນນິຍົມໄປຫາສັງຄົມນິຍົມ. ການກ້າວຂ້ຶນດັ່ງກ່າວນັ້ນແມ່ນ ການເລືອກທີ່ເປັນກົດເກນທາງດ້ານປະຫວັດສາດ. ແມ່ນມະຫາປະຕິວັດສັງຄົມນິ ຍົມເດືອນຕຸລາຢູ່ປະເທດລັດເຊຍທີ່ໄດ້ເປີດຊ່ອງທາງໃຫ້ແກ່ຂະບວນເລືອກ ດັ່ງ ກ່າວ. ມະຫາປະຕິວັດເດືອນຕຸລາໄດ້ເປີດສາກໃຫ້ແກ່ຍຸກສະໄໝອັນໃໝ່ຢູ່ໃນ ປະຫວັດສາດຂອງມວນມະນຸດ, ມັນໄດ້ທັບມ້າງທຶນນິຍົມ ບໍ່ໃຫ້ເປັນ ເຈົ້ານາຍ ຄອງຜູ້ດຽວ.

ການກຳເນີດຂຶ້ນຂອງລະບົບເສດຖະກິດສັງຄົມນິຍົມຢູ່ ສ.ສ.ສ.ຊ ມີ ຄວາມໝາຍສຳຄັນຢ່າງໃຫຍ່ຫລວງທາງດ້ານສາກົນ, ມັນໄດ້ມີພື້ນສະທ້ອນ - ແບບຕັດສິນໃຈຂາດ ຕໍ່ການເລືອກຂະຫຍາຍຕົວໃນຂັ້ນຕໍ່ໄປ ທັງໝົດຢູ່ໃນ ໂລກ ແລະ ກໍ່ໄດ້ປ່ຽນແປງໂດຍພື້ນຖານ ສະພາບການຂອງໂລກທາງດ້ານສັງຄົມ - ການເມືອງ. ການປະຕິວັດສັງຄົມນິຍົມ ຢູ່ໃນປະເທດເອີລົບ ແລະ ອາຊີ ຈຳ ນວນໜຶ່ງ ແລະ ຢູ່ກຸຍບາ ໄດ້ເປັນການສືບຕໍ່ມະຫາປະຕິວັດສັງຄົມນິຍົມເດືອນ ຕຸລາ ຢູ່ປະເທດລັດເຊຍ.

ພາຍຫລັງໄຊຊະນະຂອງການປະຕິວັດສັງຄົມນິຍົມ ໃນປະເທດ ຕ່າງໆ ແລະ ປະເທດຈຳນວນໜຶ່ງກໍ່ໄດ້ຫລຸດພົ້ນອອກຈາກລະບົບທຶນນິຍົມ, ລະບົບສັງ

ຄົມນິຍົມແຫ່ງໂລກ ກໍ່ໄດ້ກຳເນີດຂຶ້ນ ແລະ ໄດ້ມີການຂະຫຍາຍຕົວ.ການເກີດ ມີລະບົບສັງຄົມນິຍົມແຫ່ງໂລກ ໄດ້ເປັນການສະຫລຸບຜົນອັນຕົ້ນຕໍ ຂອງການຂະ ຫຍາຍຕົວແບບກ້າວໄປໜ້າຢູ່ເລື້ອຍໆ ຂອງສັງຄົມໃນຍຸກສະໄໝປະຈຸບັນ.

<u>ລະບົບສັງຄົມນິຍົມແຫ່ງໂລກ</u> ບໍ່ແມ່ນການເອົາບັນດາປະເທດທີ່ຫລຸດ ພົ້ນ ອອກຈາກທຶນນິຍົມນັ້ນ ມາບວກເຂົ້າກັນຢ່າງງ່າຍດາຍຊຶ່ງ ແຕ່ຫາກແມ່ນວົງສາ ຄະນາຍາດທາງດ້ານສັງຄົມ, ເສດຖະກິດ ແລະ ການເມືອງ ຂອງປະຊາ - ຊາດ ທີ່ມີອົດສະຫລະພາບ ແລະ ມີອະທິປະໄຕ ແລະ ພ້ອມກັນກ້າວເດີນ ໄປ ຕາມເສັ້ນທາງສັງຄົມນິຍົມ ແລະ ກອມມູນິດ ພາຍໃຕ້ຄວາມເປັນເອກະພາບ- ນຳກັນ ທາງດ້ານສິດຜົນປະໂຫຍດ ແລະ ດ້ານເປົ້າໝາຍ ໂດຍມີການຜູກພັນ ນຳກັນຢ່າງສະໜິດແໜ້ນ ບົນພື້ນຖານຄວາມສາມັກຄີສາກົນສັງຄົມນິຍົມ.

ພື້ນຖານເສດຖະກິດ ຂອງລະບົບສັງຄົມນິຍົມແຫ່ງໂລກ ແມ່ນກຳມະສິດ - ສ່ວນລວມແບບສັງຄົມນິຍົມ ກຽວກັບພາຫະນະການຜະລິດ ພາຍໃຕ້ສອງ ຮູບ ການຄື: ຂອງລັດ ແລະ ຂອງລວມໝູ່. ແມ່ນກຳມະສິດສັງຄົມນິຍົມ ທີ່ ເປັນ ເຈົ້າຄອບຄອງຢູ່ ສ.ສ.ສ.ຊ ແລະ ປະເທດສັງຄົມນິຍົມອື່ນໆ. ການຂະ - ຫຍາຍຕົວຂອງການຜະລິດສັງຄົມນິຍົມ ຢູ່ໃນບັນດາປະເທດສັງຄົມນິຍົມແມ່ນແນ ໃສ່ຮັບໃຊ້ເປົ້າໝາຍລວມຄື -ເຮັດແນວໃດຕອບສະໜອງຄວາມຮຽກຮ້ອງ - ຕ້ອງການ ທາງດ້ານວັດຖຸ ແລະ ວັດທະນະທຳ ຂອງປະຊາຊົນໃຫ້ໄດ້ ເຕັມ ສ່ວນກວ່າເກົ່າ.

ພື້ນຖານການເມືອງ ຂອງລະບົບສັງຄົມນິຍົມແຫ່ງໂລກ ແມ່ນອຳນາດເປັນ ຂອງປະຊາຊົນ ພາຍໃຕ້ການນຳພາຂອງຊົນຊັ້ນກຳມະກອນ. ກຳລັງແຮງ ນຳ ໜ້າ ແລະ ຊີວິດສ່ອງທາງຢູ່ໃນບັນດາປະເທດສັງຄົມນິຍົມ ແມ່ນບັນດາ ພັກ ກອມມູນິດ ແລະ ພັກກຳມະກອນ. ບັນດາປະເທດສັງຄົມນິຍົມ ມີສິດຜົນປະ - ໂຫຍດຮ່ວມກັນ ໃນການປົກປັກຮັກສາ ໝາກຜົນຂອງການປະຕິວັດ ແລະ ປົກ ປັກຮັກສາ ຄວາມເປັນເອກະລາດ ບໍ່ໃຫ້ຈັກກະພັດມາບຽດຍຶດໄດ້.

ຈຸດພິເສດສະເພາະຂອງລະບົບສັງຄົມນິຍົມແຫ່ງໂລກແມ່ນ ຢູ່ບ່ອນ ຄວາມ ເປັນເອກະພາບນຳກັນທາງດ້ານແນວຄິດ. ພື້ນຖານທາງດ້ານແນວຄິດຂອງບັນ ດາປະເທດສັງຄົມນິຍົມ ແມ່ນລັດທິມາກ -ເລນິນ, ສ່ວນເປົ້າໝາຍກໍ່ແມ່ນ - ການກໍ່ສ້າງສັງຄົມນິຍົມ ແລະ ສັງຄົມກອມມູນິດ. ບັນດາປະເທດສັງຄົມນິຍົມມີ

ໜ້າທີ່ເອກະພາບລວມກັນ ໃນການຕໍ່ສູ້ຕ້ານທຶນນິຍົມ ແລະ ຕ້ານນະໂຍບາຍ-ຈັກກະພັດນິຍົມຂອງມັນ.

ກົດເກນແຫ່ງການຂະຫຍາຍຕົວຂອງ ລະບົບສັງຄົມນິຍົມແຫ່ງໂລກແມ່ນກົງກັນຂ້າມບ່ານຟ້າກັບດິນ ກັບກົດເກນແຫ່ງການຂະຫຍາຍຕົວ ຂອງລະບົບ ທຶນນິຍົມ. ບົນພື້ນຖານຫລັກການທີ່ວ່າ ປະເທດທີ່ເຂັ້ມແຂງ ມີການເອົາປະເທດ ທີ່ອ່ອນເພຍ ຫລ້າຫລັງມາເປັນຂ້ອຍຂ້ານັ້ນ ລະບົບທຶນນິຍົມແຫ່ງໂລກ ຈຶ່ງໄດ້ຮັບການສ້າງຕັ້ງຂຶ້ນ ແລະ ຂະຫຍາຍຕົວ ໂດຍຜ່ານການຕໍ່ສູ້ອັນດຸເດືອດລະຫວ່າງປະເທດຕ່າງໆ ທີ່ປະກອບເຂົ້າໃນລະບົບດັ່ງກ່າວ. ສ່ວນການວັດແຫ່ງການກຳເນີດຂຶ້ນ ແລະ ການຂະຫຍາຍຕົວຂອງລະບົບສັງຄົມນິຍົມແຫ່ງໂລກ ພັດມີ ຂຶ້ນບົນພື້ນຖານອະທິປະໄຕ ແລະຄວາມສະໝັກໃຈຢ່າງເຕັມສ່ວນ ໂດຍສອດຄ່ອງກັບ ສິດເຫັນປະໂຫຍດພື້ນຖານອັນເປັນຕາຍຂອງຊາວຜູ້ອອກແຮງງານໃນບັນດາປະເທດສັງຄົມນິຍົມ.

ລະບົບທຶນນິຍົມແຫ່ງໂລກແມ່ນຕິດພັນກັນກັບ ກົດເກນວ່າດ້ວຍການຂະ - ຫຍາຍຕົວ ແບບບໍ່ສະໝ່ຳສະເໝີກັນ ທາງດ້ານເສດຖະກິດແລະການເມືອງ, ການຂະຫຍາຍຕົວຂອງການຜະລິດ ຂອງສັງຄົມ ແບບຕາມມີຕາມເກີດ ແລະ ແບບ ເອກະເທດ ກະແຈກກະຈາຍ. ລັກສະນະສະເພາະ ຂອງ ລະບົບສັງຄົມນິຍົມແຫ່ງໂລກ ພັດແມ່ນການເຕີບໃຫຍ່ ຂະຫຍາຍຕົວຢ່າງບໍ່ຢຸດ ຢັ້ງ ແລະ ຢ່າງມີແຜນການ ຂອງເສດຖະກິດ ໃນບັນດາປະເທດທີ່ເຂົ້າຢູ່ໃນລະບົບດັ່ງກ່າວ, ແລະ ແມ່ນການຍູ້ໜູນ ແລະ ການປັບປຸງທັງໝົດລະບົບສັງຄົມ ນິຍົມແຫ່ງໂລກ ໃຫ້ມີຄວາມເຂັ້ມແຂງ.

ເສດຖະກິດຂອງທຶນນິຍົມແຫ່ງໂລກ ເຄີຍມີວິກິດການ ແລະ ການສັ່ນ ສະເທືອນ. ລັກສະນະສະເພາະຂອງເສດຖະກິດ ໃນບັນດາປະເທດ ສັງຄົມນິຍົມແມ່ນຢູ່ບ່ອນ ມັນມີການເຕີບໃຫຍ່ຂະຫຍາຍຕົວດ້ວຍຈັງຫວະອັນວ່ອງໄວແລະໝັ້ນທ່ຽງແລະມີການຍູ້ໜູນເສດຖະກິດແຫ່ງຊາດຂອງບັນດາປະເທດສັງຄົມ ນິຍົມຂຶ້ນຮອບດ້ານຢ່າງເໝືອງນິດລຽນຕົດ. ບໍລິມາດລວມຂອງການຜະລິດອຸດສາຫະກຳ ຢູ່ໃນປະເທດສັງຄົມນິຍົມໃນປີ ໑໙໖໐ ໄດ້ສູງຂຶ້ນລະດັບການຜະລິດໃນ ປີ ໑໙໕໐ ໑໔ ເທົ່າ. ຖ້າສົມທຽບໃສ່ປີ ໑໙໕໐ ບໍລິມາດການຜະລິດອຸດສາຫະກຳ ໃນປີ ໑໙໖໐ ໄດ້ເພີ່ມຂຶ້ນ ໑໔ ເທົ່າ ຢູ່ ສ.ສ.ສ.ຊ, ໑໔ ເທົ່າ ຢູ່

ໂປໂລຍ, ຊ,ຄ ເທົ່າ ຢູ່ຊັກໂກສະໂລວາກີ,ຈ,ມ ເທົ່າ ຢູ່ ສ.ປ.ຢ , ຊ,ຄ ເທົ່າ ຢູ່ຮົງກະລີ, ມ້ມ ເທົ່າ ຢູ່ຮູມານີ, ໄຄ ເທົ່າ ຢູ່ ບູນກາລີ, ແລະ ຈຜ ເທົ່າ ຢູ່ມົງໂກລີ.

ຢູ່ໃນບັນດາປະເທດສັງຄົມນິຍົມ ໄດ້ມີການແກ້ໄຂໃຫ້ຕົກ ຫລືພວມມີການ-ແກ້ໄຂບັນຫາອັນຫຍຸ້ງຍາກກວ່າຫມູ່ໃນການກໍ່ສ້າງສັງຄົມນິຍົມ ນັ້ນຄືບັນຫາການກ້າວຂຶ້ນຢ່າງສະຫມັກໃຈຂອງຊົນຊັ້ນຊາວນາ ຈາກການຜະລິດສິນຄ້າຂະຫນາດນ້ອຍ ແບບເອກະເທດບົນພື້ນຖານກຳມະສິດສ່ວນຕົວຂອງໃຜລາວ ໄປຫາການຜະລິດໃຫຍ່ສັງຄົມນິຍົມແບບລວມຫມູ່ ໂດຍມີການນຳໃຊ້ເຄື່ອງຈັກກະເສດ,ອັນນີ້ມັນຢັ້ງຢືນໃຫ້ເຫັນວ່າ ຈາກການຮ່ວມມືອັນແຫນ້ນແກ່ນ ຖານອ້າຍນ້ອງນຳກັນລະຫວ່າງກຳມະກອນ ແລະ ຊາວນາ ການພົວພັນແຫ່ງການຜະລິດ ແບບ ສັງຄົມນິຍົມ ຈົ່ງມີຖານະເປັນເຈົ້າຄອບຄອງ ບໍ່ສະເພາະພຽງແຕ່ຢູ່ໃນ ຕົວເມືອງ ແຕ່ຍັງເປັນເຈົ້າຢູ່ຊົນນະບົດອີກ. ພາກສ່ວນສັງຄົມນິຍົມ ກວມອັດຕາສ່ວນ ລົ່ນ ຈ0% ຂອງເນື້ອທີ່ປູກຝັງລວມ ໃນບັນດາປະເທດສັງຄົມນິຍົມ.

ການຂະຫຍາຍຕົວໃນລະດັບສູງ ຂອງເສດຖະກິດ ໃນບັນດາປະເທດ ສັງຄົມນິຍົມ ເປັນເງື່ອນໄຂ ຊ່ວຍໃຫ້ສາມາດຮັບປະກັນການເພີ່ມທະວີລະດັບຊີວິດ ການເປັນຢູ່ທາງດ້ານວັດຖຸ ແລະ ວັດທະນະທຳ ຂອງມວນຊົນຊາວຜູ້ອອກແຮງງານຂຶ້ນ ຢ່າງບໍ່ຢຸດຢັ້ງ. ຢູ່ໃນບັນດາປະເທດສັງຄົມນິຍົມ ລາຍໄດ້ແຫ່ງຊາດມີການເພີ່ມທະວີຂຶ້ນດ້ວຍຈັງຫວະອັນວ່ອງໄວ, ໃນນັ້ນ ຄ/ຄ ແມ່ນຖືກນຳໃຊ້ເພື່ອຕອບສະຫນອງຄວາມຮຽກຮ້ອງຕ້ອງການ ອັນນັບມື້ທະວີຄູນຂຶ້ນ ຂອງຊາວຜູ້ອອກແຮງງານ.

ໃນປະຈຸບັນນີ້ ລະບົບສັງຄົມນິຍົມແຫ່ງໂລກ ໄດ້ກ້າວເຂົ້າສູ່ໄລຍະໃຫມ່ໃນການຂະຫຍາຍຕົວຂອງຕົນ. ພາຍຫລັງທີ່ໄດ້ມີການກໍ່ສ້າງສັງຄົມ ສັງຄົມນິຍົມ ຂະຫຍາຍຕົວແລ້ວ ສະຫະພາບໂຊວຽດ ໄດ້ກ້າວຂຶ້ນກໍ່ສ້າງພື້ນຖານວັດຖຸ-ເຕັກນິກ ຂອງລະບອບກອມມູນິດ. ປະເທດອື່ນໆ ຢູ່ໃນລະບົບສັງຄົມນິຍົມແຫ່ງໂລກ ໄດ້ພາກັນກໍ່ສ້າງພື້ນຖານ ຂອງສັງຄົມນິຍົມ, ສ່ວນບາງປະເທດກໍ່ໄດ້ກ້າວເຂົ້າສູ່ໄລຍະການກໍ່ສ້າງສັງຄົມນິຍົມຂະຫຍາຍຕົວແລ້ວ. ຢູ່ໃນບັນດາປະເທດສັງຄົມນິຍົມ ການພົວພັນແຫ່ງການຜະລິດ ແບບສັງຄົມນິຍົມ ມີບົດບາດເປັນເຈົ້າຄອບຄອງຢູ່ໃນເສດຖະກິດ.

ບັນດາປະເທດໃນລະບົບສັງຄົມນິຍົມແຫ່ງໂລກ ຢູ່ໃນນັ້ນ ໃນເມື່ອ - ກ່ອນໄດ້ມີຫລາຍໆປະເທດທີ່ຫລ້າຫລັງ ກໍໄດ້ກັບກາຍມາເປັນລັດສັງຄົມນິຍົມ ທີ່ກ້າວໜ້າ. ໃນໄລຍະປະຫວັດສາດອັນສັ້ນໆ ຢ່າງບໍ່ເຄີຍມີມາກ່ອນ ບັນດາ ປະເທດດັ່ງກ່າວ ໄດ້ຜ່ານຜ່າຄວາມຫລ້າຫລັງທາງດ້ານເສດຖະກິດຂອງຕົນ ແລະ ໄດ້ກໍ່ສ້າງ ແລະ ຂະຫຍາຍຊຸດສາທະກຳອັນທັນສະໄໝຂອງຕົນເອງ.

ເສດຖະກິດແບບມີແຜນການ ຂອງບັນດາປະເທດສັງຄົມນິຍົມ ຂະຫຍາຍ-ຕົວຢ່າງວ່ອງໄວ ລົ້ມເສດຖະກິດຂອງປະເທດທຶນນິຍົມຕັ້ງຫລາຍເທົ່າ. ແຕ່ການ ດຳລົງຄົງຕົວ ຂອງລະບົບສັງຄົມນິຍົມແຫ່ງໂລກ ແມ່ນການວັດ ອັນສັບສົນ ແລະ ສະຫລັບສັບຊ້ອນ ທີ່ພົວພັນກັບການຜ່ານຜ່າຄວາມຫຍຸ້ງຍາກ ລັກສະນະ ພາວະວິໄສ ແລະ ອັດຕະວິໄສ. ມີການສ້າງການພົວພັນຖານອ້າຍນ້ອງແລະ ການຮ່ວມມືນຳກັນ ລະຫວ່າງປະເທດທີ່ມີລະດັບການຂະຫຍາຍຕົວ ທາງດ້ານ ເສດຖະກິດ, ມີຮູບຮ່ອງປະເພນີ ແລະ ສາຍພົວພັນທາງດ້ານປະຫວັດສາດ , ວັດທະນະທຳ ແລະ ມີໂຄງປະກອບທາງດ້ານສັງຄົມແຕກຕ່າງກັນ.

ບົດຮຽນຕົວຈິງຢັ້ງຢືນໃຫ້ເຫັນວ່າ ຢູ່ບ່ອນໃດທີ່ມັນພົ້ນທະທຶບໄດ້ ພວກທີ່ ເປັນປໍລະປັກຕໍ່ ສັງຄົມນິຍົມນັ້ນ ລ້ວນແຕ່ມີຄວາມພະຍາຍາມຢ່າກົດຂວາງສະ ກັດກັ້ນ ບໍ່ໃຫ້ປະຕິບັດການດັດສ້າງ ສັງຄົມນິຍົມໄດ້ຢ່າງປົກກະຕິ, ພວກ ມັນ ອອກແຮງເຮັດໃຫ້ປະເທດສັງຄົມນິຍົມຜິດຖຽງກັນ, ພວກມັນພະຍາຍາມຟື້ນຄືນ ແນວຄິດຊາດນິຍົມລັບແລບ, ລັດທິແກ້ ແລະ ລັດທິສວຍໂອກາດ. ໄພອັນຕະ ລາຍອັນນີ້ແມ່ນເພີ່ມທະວີຂຶ້ນຢູ່ບ່ອນໃດ ທີ່ປ່ອຍປະໃຫ້ມີການຜິດເຂືອອອກ ຈາກ ຫລັກການຂອງລັດທິມາກ-ເລນິນ.

ມາບາດນີ້ໂລກສັງຄົມນິຍົມ ໄດ້ກ້າວເຂົ້າສູ່ໄລຍະແຫ່ງການຂະຫຍາຍ ຕົວ ເມື່ອໄດ້ເກີດມີເງື່ອນໄຂນຳໃຊ້ຄວາມອາດສາມາດ ອັນມະຫາສານທີ່ມ້ວນ-ໄວ້ຢູ່ໃນລະບອບໃໝ່ ຢ່າງເຕັມສ່ວນກວ່າເກົ່າ. ຂໍ້ສະດວກທີ່ພາໃຫ້ໄປ ເຖິງ ຂັ້ນນີ້ ໃນການຂະຫຍາຍຕົວກໍ່ຄື ການວາງ ແລະ ການນຳໃຊ້ເຂົ້າ ໃນຕົວຈິງ ຮູບການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ການເມືອງ ອັນທັນສະໄໝ ກ້າວໜ້າກວ່າເກົ່າ ທີ່ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ຂອງສັງຄົມ ນິ ຍົມ.

ແມ່ນລະບົບສັງຄົມນິຍົມແຫ່ງໂລກ, ແມ່ນບັນດາກຳລັງທີ່ຕໍ່ສູ້ຕ້ານຈັກກະພັດ

ນິຍົມ ເພື່ອດັດສ້າງສັງຄົມຄົນໃຫມ່ ແບບສັງຄົມນິຍົມນັ້ນເອງ ທີ່ເປັນຜູ້ກຳ ນົດ ເນື້ອໃນຕົ້ນຕໍ, ທິດທາງ ແລະຈຸດພິເສດພື້ນຖານ ຂອງການຂະຫຍາຍຕົວຂອງ ໂລກ ໃນຍຸກສະໄຫມປະຈຸບັນ. ບົດບາດຂອງລະບົບສັງຄົມນິຍົມແຫ່ງໂລກຢູ່ໃນ ຂະບວນວິວັດ ແຫ່ງການປະຕິວັດໂລກ ສະແດງຕົວອອກຢູ່ບ່ອນວ່າ: ອັນທີຫນຶ່ງ ຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານ ໃນບັນດາປະເທດສັງຄົມນິຍົມ ພາກັນສ້າງສາສັງຄົມໃຫມ່ ທີ່ບໍ່ມີການກົດຫນ່ວງ ແລະ ບໍ່ມີການຂູດຮີດ. ພວກ ເຂົາເຈົ້າພາກັນກໍ່ສ້າງພື້ນຖານວັດຖຸ-ເຕັກນິກ ຂອງສັງຄົມນິຍົມ ແລະລະບອບ ກອມມູນິດ ຢູ່ໃນຂົງເຂດທີ່ມີລັກສະນະຕັດສິນຊີ້ຂາດ ໃນການເຄື່ອນໄຫວ ຂອງ ສັງຄົມນັ້ນຄື ໃນຂົງເຂດການຜະລິດ. ເມື່ອຊາວຜູ້ອອກແຮງງານ ໃນປະເທດ ທຶນນິຍົມ ຫາກພາກັນເຫັນຜົນສຳເລັດຕ່າງໆ ຂອງບັນດາປະເທດສັງຄົມນິຍົມທີ່ ຍາດມາໄດ້ ໃນດ້ານການສ້າງສາ ເສດຖະກິດ, ໃນການຍົກສູງ ລະດັບຊີວິດ ການເປັນຢູ່ຂອງປະຊາຊົນຂຶ້ນ, ໃນການເສີມຂະຫຍາຍປະຊາທິປະໄຕ ແລະ ໃນການນຳເອົາມວນຊົນເຂົ້າໄປຄຸ້ມຄອງລັດ ໃນເວລານັ້ນ ພວກເຂົາເຈົ້າຈົ່ງ ມີຄວາມເຊື່ອຫມັ້ນໃນພາກຕົວຈິງວ່າ ມີແຕ່ບົນເສັ້ນທາງສັງຄົມນິຍົມ ແລະກອມ ມູນິດເທົ່ານັ້ນ ຈົ່ງຈະສາມາດ ຕອບສະຫນອງ ຄວາມຕ້ອງການຂອງຊາວ ຜູ້ ອອກແຮງງານໄດ້. ທັງຫມົດເຫລົ່ານີ້ ເປັນການປຸກລະດົມຈິດໃຈປະຕິວັດຂອງ ມວນຊົນ ແລະ ທັງເປັນການຊຸກຍູ້ ໃຫ້ພວກເຂົາເຈົ້າເຂົ້າຮ່ວມໃນການຕໍ່ສູ້ອັນ ຕັ້ງຫນ້າຕ້ານການກົດຫນ່ວງຂອງທຶນນິຍົມ ເພື່ອປົດປ່ອຍຊາດ ແລະ ປົດ ປ່ອຍ ສັງຄົມ.

ອັນທີສອງ, ບັນດາປະເທດສັງຄົມນິຍົມ ນັບມື້ນັບມີບົດບາດເພີ່ມທະວີ ສູງ ຂຶ້ນກວ່າເກົ່າ ໃນຖານະເປັນກຳລັງແຮງຕ້ານຢັນໂດຍກົງ ເລ່ກົນຮຸກຮານຂອງ ຈັກກະພັດນິຍົມ. ໃນເງື່ອນໄຂຂອງຄວາມມັ່ງຄັ່ງເຂັ້ມແຂງ ຂອງສະຫະພາບ-ໂຊວຢົດ ແລະ ທັງຫມົດວົງສາຄະນາຍາດ ສັງຄົມນິຍົມ ຈົ່ງເປັນການບັນທອນ ກຳລັງແຮງພື້ນຖານ ຂອງອິດທິກຳລັງປະຕິການສາກົນ ແລະ ກຳລັງຮຸກຮານ ຕ່າງໆ. ປະຊາຊາດຢູ່ໃນປະເທດ ທີ່ພວມຂະຫຍາຍຕົວ ໄດ້ເກີດມີຄວາມອາດ ສາມາດ ທີ່ສະດວກກວ່າຫມູ່ ເພື່ອດຳເນີນການຕໍ່ສູ້ຕ້ານຈັກກະພັດນິຍົມແລະກຳ ລັງປະຕິການພາຍໃນປະເທດ. ມັນມີການຕິດພັນກັນ ຢ່າງສະຫນິດແຫນ້ນທີ່ສຸດ ລະຫວ່າງຜົນສຳເລັດຂອງການຕໍ່ສູ້ປະຕິວັດ ຢູ່ໃນບັນດາປະເທດທຶນນິຍົມ, ໄຊ

ຊະນະ ຂອງຂະບວນການຕໍ່ສູ້ປົດປ່ອຍຊາດ ກັບ ການເພີ່ມທະວີຄວາມມັ່ງຄັ່ງ-ເຂັ້ມແຂງ ຂອງລະບົບສັງຄົມນິຍົມແຫ່ງໂລກ.

ການເກີດມີລະບົບສັງຄົມນິຍົມແຫ່ງໂລກ, ຄວາມເປັນເອກະພາບ ແລະ ເປັນປຶກແຜ່ນແໜ້ນໜາ ອັນນັບມື້ນັບໄດ້ຮັບການປັບປຸງໃຫ້ເຂັ້ມແຂງຢູ່ໃນ ລະບົບດັ່ງກ່າວ ລ້ວນແຕ່ເປັນການສ່ອງແສງເຖິງ " ການພົວພັນແບບໃໝ່ ທີ່ ບໍ່ເຄີຍມີມາກ່ອນໃນປະຫວັດສາດ ລະຫວ່າງລັດຕ່າງໆນຳກັນ ຊຶ່ງເປັນການ ພົວພັນທີ່ເປັນທຳ, ສະເໝີພາບ ແລະ ຖານອ້າຍນ້ອງນຳກັນຢ່າງແທ້ຈິງ ".[1]

๔. ການຮ່ວມມື ແລະ ການຊ່ວຍເຫລືອຊຶ່ງກັນແລະກັນ ແມ່ນພື້ນຖານອີງ ຂອງການພົວພັນ ທາງດ້ານເສດຖະກິດ ລະຫວ່າງປະເທດຕ່າງໆຢູ່ໃນລະບົບສັງຄົມນິຍົມແຫ່ງໂລກ

ການຮ່ວມມື ແລະ ການຊ່ວຍເຫລືອຊຶ່ງກັນ ແລະກັນ ລະຫວ່າງປະເທດສັງຄົມນິຍົມ ນັບເປັນຖານຄວາມເປັນເອກະພາບ ທາງດ້ານເສດຖະກິດ, ການເມືອງ ແລະ ແນວຄິດ ໄດ້ພາໄປເຖິງບ່ອນມີການສ້າງຕັ້ງລະບົບເສດຖະກິດສັງຄົມນິຍົມແຫ່ງໂລກ.

ລະບົບເສດຖະກິດສັງຄົມນິຍົມແຫ່ງໂລກ ແມ່ນລະບົບເສດຖະກິດແຫ່ງລັດປະຈຳຊາດຢ່າງຄົບຊຸດ ຂອງບັນດາປະເທດສັງຄົມນິຍົມ ທີ່ມີສິດອຳນາດອະທິປະໄຕຂອງຕົນ ແລະ ມີການພົວພັນຢ່າງສະໜິດແໜ້ນນຳກັນ ຜ່ານການ - ຮ່ວມມືທາງດ້ານເສດຖະກິດ ແລະ ວິທະຍາສາດ-ເຕັກນິກ, ຜ່ານການແບ່ງງານສາກົນສັງຄົມນິຍົມ ແລະ ຜ່ານຕະຫລາດສັງຄົມນິຍົມແຫ່ງໂລກ.

ແນວຄິດແຫ່ງມິດຕະພາບ,ການຮ່ວມມື ແລະ ການຊ່ວຍເຫລືອຊຶ່ງ ກັນ ແລະກັນ ລະຫວ່າງປະເທດສັງຄົມນິຍົມ ໄດ້ຮັບການຍົ່ງໄວ້ ໃນກົດລັດຖະທຳ

---

๑) ເອກະສານ ກອງປະຊຸມໃຫຍ່ຄັ້ງທີ ๘ฝ ຂອງ ພ.ກ.ສ.ຊ,ມົດສະກູ, ປີ ๑ฝ๗๑, ໜ້າ ๕.

ມະນຸມ ຂອງປະເທດອ້າຍນ້ອງສ່ວນຫລວງຫລາຍ. " ລັດຖະທຳມະນຸມສະ-ບັບໃໝ່ ຂອງ ສ.ສ.ສ.ຊ ໄດ້ປະກາດເອົາມິດຕະພາບ, ການຮ່ວມມື , ການຊ່ວຍເຫລືອຊຶ່ງກັນ ແລະ ກັນ ກັບບັນດາປະເທດສັງຄົມນິຍົມ ເປັນ ຫລັກ ໃຈກາງຂອງນະໂຍບາຍການຕ່າງປະເທດຂອງໂຊວຽດ ". ๑)

ການພົວພັນແບບໃໝ່ທາງດ້ານ ເສດຖະກິດ ແລະ ການເມືອງ

ໄດ້ມີການພົວພັນແບບໃໝ່ ທາງດ້ານເສດ ຖະກິດ ແລະ ການເມືອງ ລະຫວ່າງ ບັນ ດາປະເທດ ຢູ່ໃນລະບົບສັງຄົມນິຍົມແຫ່ງ-ໂລກນຳກັນ ຊຶ່ງບໍ່ເຄີຍມີມາກ່ອນ ຢູ່ໃນປະຫວັດສາດ. ການພົວພັນດັ່ງກ່າວ ນີ້ ລະຫວ່າງບັນດາປະເທດສັງຄົມນິຍົມນຳກັນ ໄດ້ມີການສ້າງຕັ້ງຂຶ້ນ ບົນພື້ນຖານ ຫລັກການ ສະເໝີພາບຢ່າງເຕັມປ່ຽມ, ການນັບຖືຜົນແຜ່ນດິນອັນຄົບຖ້ວນ , ເອກະລາດແຫ່ງຊາດ ແລະ ອະທິປະໄຕ, ບໍ່ແຊກແຊງເຂົ້າ ໃນກິດຈະການ ພາຍໃນຂອງກັນ. ບັນດາຫລັກການອັນສຳຄັນດັ່ງກ່າວນີ້ ກໍຍັງບໍ່ທັນກວມ ເອົາ ໝົດທາດແທ້ເນື້ອໃນຂອງການພົວພັນລະຫວ່າງປະເທດສັງຄົມນິຍົມ.ຂໍ້ຫມາຍ ອັນບໍ່ຂາດໄດ້ ໃນການພົວພັນຊຶ່ງກັນແລະກັນ ລະຫວ່າງປະເທດສັງຄົມນິຍົມ ກໍ ແມ່ນບັນຫາເລື່ອງການຊ່ວຍເຫລືອຊຶ່ງກັນ ແລະ ກັນຖານອ້າຍນ້ອງ. ຫລັກ - ການສາກົນກຳມາຊີບ ໄດ້ປະກົດຕົວອອກມາ ໃນການຊ່ວຍເຫລືອຊຶ່ງກັນ ແລະ ກັນ ລະຫວ່າງປະເທດສັງຄົມນິຍົມ. ໃນສະໄໝນີ້ ເມື່ອໂລກຖືກແຕກອອກ - ເປັນສອງລະບົບ ກະໂຕການຍືນຍົງຕົວຂອງຫລາຍໆປະເທດສັງຄົມນິຍົມ , ການກ້າວເດີນໄປໜ້າຢ່າງມີໄຊ ຂອງປະເທດດັ່ງກ່າວ ລ້ວນແຕ່ໄດ້ເປັນ ໄປ ໄດ້ຍ້ອນວ່າ ມັນມີວົງສາຄະນາຍາດແຫ່ງໂລກ ຂອງບັນດາປະເທດສັງຄົມນິຍົມ ແລະ ກໍໄດ້ມີຄວາມອາດສາມາດອີງໃສ່ຄວາມມັ່ງຄັ່ງເຂັ້ມແຂງທາງດ້ານ ເສດ ຖະກິດ ແລະ ອີງໃສ່ຄວາມເປັນເອກະພາບ ທາງດ້ານການເມືອງ ຂອງ ວົງ ສາຄະນາຍາດດັ່ງກ່າວໄດ້.

ການຮ່ວມມືໃນຫລາຍດ້ານ ລະຫວ່າງປະເທດສັງຄົມນິຍົມນຳກັນ ເປັນ ຂໍ້

---

๑) ๑๑ກະສານ ກອງປະຊຸມໃຫຍ່ຄັ້ງທີ ๘ฝ ຂອງ ພ.ກ.ສ.ຊ ມົດສະກູ, ປີ ๑ฝ๗๑, ໜ້າ ฝ.

ສະດວກ ໃຫ້ສາມາດໝູນໃຊ້ທ່າດີເລີດ ຂອງລະບົບສັງຄົມນິຍົມ ແຫ່ງໂລກ ຢ່າງສຸດຂີດ ເພື່ອເສີມຂະຫຍາຍກຳລັງການຜະລິດໃນແຕ່ລະປະເທດຢ່າງລົ້ງ ລັດ ແລະ ປັບປຸງຄວາມເຂັ້ມແຂງ ທາງດ້ານເສດຖະກິດ ຂອງທັງໝົດ ປະ ເທດ ສັງຄົມນິຍົມເວົ້າລວມ. ການສ້າງຕັ້ງການພົວພັນແບບໃໝ່ ທາງດ້ານ-ເສດຖະກິດ ແລະ ການເມືອງ ມັນແມ່ນເຫດການທີ່ມີລັກສະນະເປັນກົດເກນ, ຢູ່ມີພື້ນຖານອັນແໜ້ນແກ່ນທາງດ້ານສັງຄົມ-ເສດຖະກິດ ແລະ ດ້ານແນວຄິດ. ການພົວພັນແບບໃໝ່ນັ້ນ ມັນຕ້ົ້ນເມືອງອອກມາຈາກກະໂຕທາດແທ້ ເນື້ອ ໃນ ຂອງລະບອບສັງຄົມນິຍົມ ໝາຍຄວາມວ່າ ຈາກການມີຖານະເປັນເຈົ້າ ຄອບ ຄອງ ຂອງການພົວພັນແຫ່ງການຜະລິດແບບສັງຄົມນິຍົມ. ຍ້ອນແນວນ້ັ້ນໃນການ ພົວພັນຊ່ວຍກັນແລະກັນ ລະຫວ່າງປະເທດສັງຄົມນິຍົມ ມັນຈ່ົ່ງບ່ໍ່ມີ້ໍ່ລະນີຢາກແຜ ຂະຫຍາຍອຳນາດ ທາງດ້ານເສດຖະກິດ ແລະ ບ່ໍ່ມີສະພາບ ມີຜູ້ເປັນແຫ້ລ່ງ ແລະ ຜູ້ເປັນນາຍ.

ຢູ່ໃນລະບົບສັງຄົມນິຍົມແຫ່ງໂລກ ການພົວພັນ ແລະ ສາຍສຳພັນ ທາງ ດ້ານເສດຖະກິດລະຫວ່າງລັດຕ່າງໆມ່ໍ່ກັນ ລ້ວນແຕ່ໄດ້ດຳເນີນໄປ ໂດຍສອດ ຄ່ອງກັບບັນດາກົດເກນເສດຖະກິດ ຂອງສັງຄົມນິຍົມ ແລະ ມັນກ່ໍ່ຮັບໃຊ້ໜ້າທີ່ ເປີດກ້ວ້າງການຜະລິດຢ່າງເມືອງນິດລຽນຕິດ ບົ້ນພື້ນຖານການນຳໃຊ້ເຕັກນິກ ອັນທັນສະໄໝ ແລະ ກ້າວໜ້າ ເພື່ອຮຸດໜ້ີ້ນສິ່ງຍູ້້ໜູນ ລະດັບການຢູ່ດີ ກິນດີ ຂອງປະຊາຊົ້ນ.

ການແບ່ງງານສາກົນ ສັງຄົມນິຍົມ

ການຮ່ວມມືທາງດ້ານເສດຖະກິດລະຫວ່າງ ປະ ເທດສັງຄົມນິຍົມນຳກັນ ໄດ້ມີການຂະຫຍາຍ ຕົວ ແລະ ໄດ້ຮັບການປັບປຸງ ໃຫ້ເຂ້ັ້ມແຂງ ບົ້ນ ພື້ນ ຖານ<u>ການແບ່ງງານສາກົນສັງຄົມນິຍົມ</u>. ການແບ່ງງານກັນລະຫວ່າງປະເທດ-ສັງຄົມນິຍົມ ແມ່ນແຕກຕ່າງ ໂດຍພື້ນຖານທາງດ້ານຫລັກການ ກັບ ການແບ່ງ ງານຢູ່ໃນລະບົບທຶນນິຍົມແຫ່ງໂລກ. ການແບ່ງງານສາກົນທຶນນິຍົມ ແມ່ນດຳ - ເນີນໄປແບບຕາມມີຕາມເກີດ ໂດຍຜ່ານການຕ່ໍ້ສູ້ ຊ່ວງຊ້ັງກັນ ຢ່າງຟ້ດ - ເດ້ືອດ ແລະ ໂດຍຜ່ານການຍາດຊ່ີ້ງກັນ ຊອກຫາກຳໄລ. ການແບ່ງງານສາ ກົນສັງຄົມນິຍົມ ແມ່ນດຳເນີນໄປຢ່າງມີແຜນການ ບົ້ນພື້ນຖານກົດເກນອ່ໍ້ຍ

ການຂະຫຍາຍຕົວ ຂອງເສດຖະກິດແຫ່ງຊາດ ຢ່າງມີແຜນການ.

ສັງຄົມນິຍົມໄດ້ສ້າງເງື່ອນໄຂເປັນຄັ້ງທຳອິດ ເພື່ອເປີດການຮ່ວມມື ແບບສະໝັກພາບ ແລະ ຕ່າງຝ່າຍມີຜົນປະໂຫຍດນຳກັນລະຫວ່າງປະຊາຊາດໃຫຍ່ ແລະ ນ້ອຍ. ສັງຄົມນິຍົມຍັງຮັບປະກັນ ໃຫ້ມີການປັບປຸງຄວາມເປັນເອກະ - ລາດທາງດ້ານເສດຖະກິດ ຂອງບັນດາປະເທດ ທີ່ນອນຢູ່ໃນລະບົບສັງຄົມນິຍົມ ແຫ່ງໂລກ. ໂດຍມີການປະສົມປະສານຢ່າງກົມກຽວກັນ ລະຫວ່າງບັນດາ ປະ ເທດສັງຄົມນິຍົມ ຈຶ່ງມີຄວາມອາດສາມາດປະຢັດແຮງງານ ແລະ ພາຫະນະ ເພື່ອເສີມຂະຫຍາຍກຳລັງການຜະລິດຢ່າງຮອບດ້ານ. ບົນພື້ນຖານການ ແລກ ປ່ຽນຊຶ່ງກັນແລະກັນ ແຕ່ລະປະເທດ ສາມາດນຳໃຊ້ບໍ່ສະເພາະພຽງແຕ່ຊັບພະ ຍາກອນ ຂອງຕົນເອງເທົ່ານັ້ນ ແຕ່ຍັງສາມາດນຳໃຊ້ຊັບພະຍາກອນຂອງປະ ເທດອື່ນໆ ທີ່ນອນຢູ່ໃນລະບົບສັງຄົມນິຍົມແຫ່ງໂລກອີກ. ອັນນີ້ແມ່ນ ຂໍ້ສະດວກ ເພື່ອໃຫ້ສາມາດນຳໃຊ້ຄວາມອາດສາມາດທັງໝົດ ທາງດ້ານເສດຖະກິດຂອງ ລະບົບສັງຄົມນິຍົມແຫ່ງໂລກໄດ້ຢ່າງຖືກຕ້ອງເໝາະສົມກວ່າເກົ່າ ເພື່ອແໃສ ພັດທະນາເສດຖະກິດ ແລະ ຍູ້ໜູນລະດັບຄວາມຢູ່ດີກິນດີ ຂອງປະຊາຊາດ ຢູ່ ໃນປະເທດສັງຄົມນິຍົມທັງໝົດຂຶ້ນຢ່າງລົ້ງລັດ.

ການແບ່ງງານສາກົນສັງຄົມນິຍົມ ເປັນຂໍ້ສະດວກ ທີ່ຊ່ວຍໃຫ້ແຕ່ລະ ປະ ເທດ ສາມາດສຸມຄວາມເອົາໃຈໃສ່ເປັນພິເສດຕໍ່ຂະແໜງການຕ່າງໆ ດ້ານ ການຜະລິດຂອງສັງຄົມນິຍົມ ປະເທດທີ່ຕ້ຳໂຮມເງື່ອນໄຂສະດວກຫລາຍກວ່າ ໝູ ໝາຍຄວາມວ່າ ປະເທດທີ່ມີຊັບພະຍາກອນທຳມະຊາດ ແລະ ມີພື້ນຖານ ທາງດ້ານວັດຖຸ, ມີພື້ນຖານການຜະລິດ, ມີພື້ນຖານທາງດ້ານກຳມະກອນແລະ ພະນັກງານວິສະວະກອນ-ເຕັກນິກ ແລະ ມີການຜະລິດທີ່ຂະຫຍາຍຕົວ ໃນລະ ດັບອັນແໜ່ນອນແລະອື່ນໆ.

ບັນດາຫລັກການພື້ນຖານຂອງການແບ່ງງານສາກົນສັງຄົມນິຍົມມີດັ່ງນີ້:

-ການຄຳນຶງເຖິງອັດຕາສ່ວນອັນຈຳເປັນຢ່າງພາວະວິໄສ ກຽວກັບ ການ ຂະຫຍາຍຕົວທາງດ້ານເສດຖະກິດຂອງປະເທດໃດໜຶ່ງສະເພາະ ແລະ ຂອງ ທັງໝົດລະບົບສັງຄົມນິຍົມແຫ່ງໂລກ ເພື່ອຮັບໃຫ້ເສດຖະກິດມີການຊຸມດຽງ;

-ການຮັບປະກັນທີ່ຮັບໃຫ້ການແບ່ງງານສາກົນມີປະສິດທິພົນສູງທາງດ້ານ ເສດຖະກິດ ຊ່ວຍສະແດງຕົວອອກ ໃນການເພີ່ມທະວີການຜະລິດດ້ວຍຈັງ ຫວະ

ອັນວ່ອງໄວ ແລະ ໃນການຕອບສະໜອງ ຄວາມຮຽກຮ້ອງຕ້ອງການຂອງປະ
ຊາຊົນ ໃນແຕ່ລະປະເທດຢ່າງເຕັມສ່ວນກວ່າເກົ່າ;

-ການປະສານສົມທົບນຳກັນລະຫວ່າງການແບ່ງເຂດການຜະລິດໃນສາກົນ
ກັບການພັດທະນາເສດຖະກິດ ຢູ່ໃນປະເທດໃດໜຶ່ງສະເພາະຢ່າງຄົບຊຸດເພື່ອ
ແໝໃສ່ ເຮັດໃຫ້ມີການນຳໃຊ້ ບັນດາປັດໄຈ ທາງດ້ານທຳມະຊາດ ແລະດ້ານ
ເສດຖະກິດຂອງການຜະລິດ ຢູ່ໃນໝົດທຸກປະເທດ ຢ່າງເໝາະສົມກວ່າໜ່ວ,
ນັບທັງຊຸບພະຍາກອນທາງດ້ານແຮງງານ;

-ການຜ່ານຜ່າເປັນເທື່ອລະກ້າວ ຄວາມແຕກຕ່າງກັນທາງດ້ານເສດຖະ-
ກິດ ທີ່ປະຫວັດສາດໄດ້ປະໄວ້ໃຫ້ ໂດຍມີການນຳໃຊ້ ຄວາມອາດສາມາດຂອງ
ແຕ່ລະປະເທດ ແລະ ທ່າດີເລີດຂອງລະບົບສັງຄົມນິຍົມແຫ່ງໂລກຢ່າງສຸດຂີດ.

ຢູ່ໃນການແບ່ງງານສາກົນສັງຄົມນິຍົມ ມີການປະສານ ຢ່າງກົມກຽວ ກັນ
ລະຫວ່າງໜ້າທີ່ພັດທະນາເສດຖະກິດແຫ່ງຊາດ ຂອງແຕ່ລະປະເທດ ກັບໜ້າ
ທີ່ສາກົນກຽວກັບການພັດທະນາທັງໝົດລະບົບສັງຄົມນິຍົມແຫ່ງ ໂລກ.

ການແບ່ງເຂດການຜະລິດແລະ ການສຳພັນການຜະລິດ	ການແບ່ງງານສາກົນສັງຄົມນິຍົມ ກຳນົດ ໃຫ້ມີການແບ່ງເຂດການຜະລິດ ແລະ ມີ ການສຳພັນການຜະລິດ. <u>ການແບ່ງ ເຂດ ການຜະລິດ</u> ຢູ່ໃນລະບົບສັງຄົມນິຍົມແຫ່ງໂລກ ໝາຍເຖິງການເສີມຂະຫຍາຍ ບາງຂະແໜງການຜະລິດໃດໜຶ່ງສະເພາະເຈາະຈົ່ງ ໂດຍກຳນົດຈຸດໝັກ ຢູ່ ໃນບັນດາປະເທດ ບ່ອນໃດທີ່ມີຄວາມອາດສາມາດຜະລິດ ຜະລິດຕະພັນທີ່ກຽ ຂ້ອງໄດ້ ດ້ວຍການໃຊ້ແຮງງານລະດັບຕ່ຳສຸດ. <u>ການສຳພັນການຜະລິດ</u> ມີບົດ ບາດເປັນສາຍສຳພັນທີ່ເຊື່ອມໂຍງ ແລະປະສົມປະສານການຜະລິດ ທີ່ໄດ້ຮັບ ການແບ່ງເປັນປະເພດຕ່າງໆເຂົ້າກັນ ເພື່ອຈຸດປະສົງໃຫ້ໄດ້ຮັບ ປະສິດທິຜົນ ທາງດ້ານເສດຖະກິດໃນລະດັບສູງສຸດ ໃນເວລາຜະລິດເຄື່ອງຂອງໃດໜຶ່ງສະ ເພາະເຈາະຈົ່ງ.

ໃນຖານະເປັນຮູບການແບ່ງງານສາກົນສັງຄົມນິຍົມທີ່ກ້າວໜ້າ ການແບ່ງ
ເຂດການຜະລິດ ແລະ ການສຳພັນການຜະລິດ ດ້ານໜຶ່ງເປັນເງື່ອນໄຂອຸ່ວຍ
ໃຫ້ສາມາດຮັບປະກັນ ໃຫ້ມີການເຕົ້າໂຮມໃນລະດັບສູງ ການຜະລິດ ຜະລິດ

ຕະພັນປະເພດດຽວກັນ ຢູ່ໃນປະເທດດຽວກັນ ຫລື ຢູ່ຫລາຍປະເທດ ເພື່ອ ຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງປະເທດອື່ນໆທັງໝົດ, ອີກດ້ານ ໜຶ່ງ ກໍແມ່ນແນໃສ່ໃຫ້ໄດ້ຮັບລະດັບຄາດໝາຍທາງດ້ານຄຸນນະພາບຂັ້ນດີເລີດ ຢູ່ໃນໂລກ ແລະ ໃຫ້ ຜະລິດຕະພັນມີລະດັບຕັກນິກສູງ.

ການຈັດຕັ້ງການແບ່ງເຂດການຜະລິດ ແລະ ການສຳພັນການຜະລິດ ດຳ ເນີນໄປໂດຍມີການຄຳນຶງເຖິງບໍ່ແມ່ນແຕ່ສິດຜົນປະໂຫຍດອັນສະເພາະຂອງແຕ ລະປະເທດໃດໜຶ່ງເທົ່ານັ້ນ ແຕ່ນັບທັງສິດຜົນປະໂຫຍດລວມຂອງທັງໝົດ ປະ ເທດສັງຄົມນິຍົມອີກດ້ວຍ. ສິ່ງດັ່ງກ່າວເປັນເງື່ອນໄຂອຸ່ວຍໃຫ້ສາມາດນຳ ໃຊ້ ຄວາມອາດສາມາດ ຂອງບັນດາປະເທດສັງຄົມນິຍົມ ທາງດ້ານການຜະລິດ - ເປັນຈຸດຂະໜາດໃຫຍ່ໄດ້ຢ່າງກວ້າງຂວາງ, ຫລຸດຜ່ອນການໃຊ້ຈ່າຍໃນການ ຜະລິດ ແລະ ປັບປຸງຄຸນນະພາບ ຂອງຜະລິດຕະພັນໃຫ້ສູງກ່ວາເກົ່າ.

ຜ່ານການຮ່ວມມືທາງດ້ານເສດຖະກິດ ແລະ ການແບ່ງເຂດ ການຜະລິດ ປະເທດສັງຄົມນິຍົມ ກໍໄດ້ຄ່ອຍໆມີຄວາມຊຳນິຊຳນານ ໃນການຜະລິດ ຢູ່ ໃນ ຂະແໜງການຈຸດສາຫະກຳໃດໜຶ່ງ, ນອກນັ້ນຍັງທັງເປັນການກຳນົດ ຖານະ ບົດບາດ ຂອງປະເທດດັ່ງກ່າວ ຢູ່ໃນລະບົບການພົວພັນເສດຖະກິດ ລະຫວ່າງ ປະເທດສັງຄົມນິຍົມນຳກັນ.

ຍົກຕົວຢ່າງ, ໂປໂລຍກໍໄດ້ກາຍເປັນປະເທດໜຶ່ງ ທີ່ມີຂະແໜງການ ກໍ ສ້າງເຄື່ອງຈັກອັນກ້າວໜ້າຂະຫຍາຍຕົວ, ມີຂະແໜງການຈຸດສາຫະກຳ ຈຸດ ຄົ້ນຖ່ານຫີນ ແລະ ຈຸດສາຫະກຳເຄມີ, ມີຂະແໜງການຈຸດສາຫະກຳ ຫລອມ ໂລຫະສີ. ຢູ່ເຊັກໂກສະໂລວາກີ ແມ່ນຂະແໜງການກໍ່ສ້າງເຄື່ອງຈັກ ຂະ ໜາດໜັກ ແລະ ຂະແໜງການກໍ່ສ້າງເຄື່ອງຈັກໄຟຟ້າ ແລະ ບາງຂະ - ແໜງການຈຸດສາຫະກຳເບົາ ທີ່ຂະຫຍາຍຕົວຢ່າງເປັນຈຸດໜັກ. ຜ່ານການ ແບ່ງເຂດການຜະລິດນັ້ນສາທາລະນະລັດປະຊາທິປະໄຕເຢຍລະມັນ ແມ່ນ ລົ້ງ ເລີກ ໃນຂະແໜງການຈຸດສາຫະກຳກໍ່ສ້າງເຄື່ອງຈັກໄຟຟ້າຂະໜາດໜັກ , ຂະແໜງການຈຸດສາຫະກຳກໍ່ສ້າງເຄື່ອງຈັກວັດແທກ ທີ່ມີຄວາມຊັດເຈນສູງ , ຂະແໜງການຈຸດສາຫະກຳຜະລິດແກ້ວຂະຫຍາຍ, ຂະແໜງການ ຈຸດສາຫະ ກຳຜະລິດເຄື່ອງເຄມີ. ຢູ່ຮູມານີ ຂະແໜງການຈຸດສາຫະກຳ ປຸງແຕ່ງນ້ຳມັນ ແລະຂະແໜງການຈຸດສາຫະກຳຜະລິດເຄື່ອງ ອຸປະກອນ ສຳລັບຈຸດສາຫະກຳ

ຂຸດຄົ້ນນ້ຳມັນ ແລະ ອື່ນໆ ແມ່ນມີການຂະຫຍາຍຕົວຢ່າງຫລວງຫລາຍ.

ໃນເວລາທີ່ບັນດາປະເທດສັງຄົມນິຍົມສ່ວນຫລວງຫລາຍ ມີການແບ່ງ ກັນ ຜະລິດສິ່ງໃດສິ່ງຫນຶ່ງສະເພາະ ສ.ສ.ສ.ຊ ທີ່ເປັນປະເທດຫນຶ່ງ ທີ່ມີ ດິນ ແດນອັນກວ້າງຂວາງ, ມີຊັບພະຍາກອນທຳມະຊາດຫລາຍໆຊະນິດ ແລະ ມີ ພົນລະເມືອງເປັນຈຳນວນຫລວງຫລາຍນັ້ນ ພັດມີການຂະຫຍາຍຫມົດທຸກຂະ - ແຫນງການ ທີ່ເປັນພື້ນຖານ ສຳລັບເສດຖະກິດແຫ່ງຊາດ. ແຕ່ເຖິງຢ່າງ ໃດ ກໍ່ດີ ສິ່ງດັ່ງກ່າວມານີ້ ບໍ່ສະເພາະແຕ່ບໍ່ໄດ້ ເປັນການກີດຂວາງ ບໍ່ໃຫ້ສະຫະ ພາບໂຊວຽດ ໄດ້ເຂົ້າຮ່ວມຢ່າງກວ້າງຂວາງ ໃນການແບ່ງງານສາກົນ ແບບ ສັງຄົມນິຍົມເທົ່ານັ້ນ ແຕ່ກົງກັນຂ້ານມັນຍັງໄດ້ສ້າງເງື່ອນໄຂ ທີ່ອຳນວຍຄວາມ ສະດວກທີ່ສຸດ ເພື່ອເສີມຂະຫຍາຍການແບ່ງເຂດການຜະລິດ ແລະ ການ ສຳ ພັນການຜະລິດ ຢູ່ໃນລະບົບສັງຄົມນິຍົມແຫ່ງໂລກ.

ການເຮັດໃຫ້ລະດັບການຂະຫຍາຍຕົວໃນບັນ ຖ້າຫາກວ່າໃນລະບົບ ເສດ
ດາປະເທດສັງຄົມນິຍົມສະຫມຳ່ສະເຫມີກັນ ຖະກິດ ທຶນນິຍົມ ແຫ່ງໂລກ
ການແບ່ງງານສາກົນໄດ້ພາ

ໄປເຖິງ ບ່ອນມີການກຳເນີດມະຫາອຳນາດຈັກກະພັດທີ່ຂະຫຍາຍຕົວດ້ານຫນຶ່ງ ແລະ ຂອງບັນດາປະເທດກະສິກຳທີ່ຫລ້າຫລັງອີກດ້ານຫນຶ່ງນັ້ນ ແຕ່ໃນ ລະບົບ ສັງຄົມນິຍົມແຫ່ງໂລກ ການແບ່ງງານສາກົນ ໄດ້ປະກົດຕົວອອກມາ ຢູ່ບ່ອນ ມີ ການຈັດວາງການຜະລິດ ຢ່າງມີແຜນການ ແລະ ຢ່າງຖືກຕ້ອງເຫມາະສົມລະ ຫວ່າງປະເທດສັງຄົມນິຍົມນຳກັນ.

ການແບ່ງງານສາກົນສັງຄົມນິຍົມສ້າງ ເງື່ອນໄຂໃຫ້ສາມາດ<u>ເຮັດໃຫ້ ລະ ດັບການຂະຫຍາຍຕົວທາງດ້ານເສດຖະກິດ ຂອງບັນດາປະເທດຢູ່ໃນລະບົບສັງ ຄົມນິຍົມແຫ່ງໂລກສະຫມຳ່ສະເຫມີກັນ</u>: ອັນທີຫນຶ່ງ, ມັນຄ່ອຍໆມີການ ເຮັດ ໃຫ້ ລະດັບການຜະລິດ ອຸດສາຫະກຳ ແລະ ກະສິກຳ ກ່ຽວກັບ ຜະລິດຕະພັນ ຊະນິດທີ່ມີຄວາມສຳຄັນທີ່ສຸດ ເມື່ອຄິດສະເລ່ຍໃສ່ແຕ່ລະຄົນແລ້ວ ສະຫມຳ່ ສະ ເຫມີກັນ; ອັນທີສອງ, ມັນມີການຜ່ານຜ່າຄວາມແຕກຕ່າງກັນທາງດ້ານ ລະ ດັບການປະກອບເຕັກນິກເຂົ້າຮັບໃຊ້ການຜະລິດ, ລະດັບວັດທະນະທຳ- ເຕັກ ນິກຂອງຊາວຜູ້ອອກແຮງງານ ແລະ ຈາກອັນນີ້ ກໍ່ແມ່ນທັງຄວາມແຕກຕ່າງກັນ

ທາງດ້ານລະດັບສະມັດຖະພາບຂອງການອອກແຮງງານໃນສັງຄົມ, ອັນທີສາມ, ມັນມີການເຮັດໃຫ້ລະດັບ ຊີວິດການເປັນຢູ່ຂອງປະຊາຊົນ ຫຍັບເຂົ້າ ໃກ້ກັນ ແລະ ສະໝ່ຳສະເໝີກັນ.

ສະຫລຸບຄວາມໄດ້ວ່າ ເກີດມີກົດເກນພາວະວິໄສອັນໃໝ່ ຢູ່ໃນລະບົບສັງຄົມນິຍົມແຫ່ງໂລກ. ລະບອບສັງຄົມນິຍົມໄດ້ສ້າງເງື່ອນໄຂເພື່ອລົບລ້າງບໍ່ ໃຫ້ປະເທດຕ່າງໆ ມີລະດັບຂະຫຍາຍຕົວທາງດ້ານເສດຖະກິດ ແລະ ວັດທະນະ-ທຳ ຫລຸດໂຕນກັນຄົ່ງທີ່ໄດ້ສືບທອດມາແຕ່ລະບອບຫົມນິຍົມ, ເພື່ອເຮັດໃຫ້ບັນ ດາປະເທດທີ່ຫລ້າຫລັງ ທາງດ້ານເສດຖະກິດ ພາຍໃຕ້ລະບອບຫົມນິຍົມ ໄດ້ມີ ການພັດທະນາ ຂະຫຍາຍຕົວຢ່າງວ່ອງໄວກວ່າເກົ່າ, ເພື່ອຍູ້ໜູນເສດຖະກິດ ແລະ ວັດທະນະທຳ ຢູ່ໃນປະເທດດົ່ງກ່າວມີຂົມຢ່າງບໍ່ຢຸດຢັ້ງ ແລະ ເພື່ອເຮັດ ໃຫ້ລະດັບການຂະຫຍາຍຕົວລວມຂອງບັນດາປະເທດໃນວົງສາຄະນາຍາດ ສັງ ຄົມນິຍົມສະໝ່ຳສະເໝີກັນ.

ຄວາມຈຳເປັນທີ່ໜົດທຸກໆປະເທດສັງຄົມນິຍົມ ຈະຕ້ອງມີເສດຖະກິດ ຂະ ຫຍາຍຕົວໃນລະດັບສູງນັ້ນ ແມ່ນມາຈາກຍ້ອນທີ່ວ່າ ສັງຄົມນິຍົມບໍ່ສາມາດຈະຢູ່ ເມີນເສີຍ ຕໍ່ສະພາບ ແຫ່ງຄວາມຫລ້າຫລັງ ທາງດ້ານເສດຖະກິດ ແລະ ວັດທະນະທຳ ຊຶ່ງສືບທອດມາ ຈາກລະບອບເກົ່າ. ການສ້າງຕັ້ງ ການ ພົວພັນ ແຫ່ງການຜະລິດ ອັນໃໝ່ ແບບສັງຄົມນິຍົມໄດ້ເປີດຊ່ອງທາງໃຫ້ມີ ການຍູ້ໜູນກຳລັງການຜະລິດອັນ ແລະ ໃຫ້ໜົດທຸກປະເທດທີ່ນອນຢູ່ໃນລະບົບ ສັງຄົມນິຍົມແຫ່ງໂລກ ໄດ້ມີການຂະຫຍາຍຕົວ ທາງດ້ານເສດຖະກິດຢ່າງລົ້ງ ລັດ.

ອີງໃສ່ການເຄື່ອນໄຫວ່ຂອງບັນດາກົດເກນອັນໃໝ່ ວ່າດ້ວຍ ການຂະ ຫຍາຍຕົວຂອງສັງຄົມ ແລະ ໂດຍອີງໃສ່ບົດຮຽນຂອງ ປະເທດ ສັງຄົມນິຍົມ ອ່ືນໆ ອີງໃສ່ການຮ່ວມມື ແລະ ການຊ່ວຍເຫລືອຊຶ່ງກັນ ແລະກັນ ບັນດາ ປະ ເທດທີ່ໃນເມື່ອກ່ອນຫລ້າຫລັງທາງດ້ານເສດຖະກິດ ຈຶ່ງສາມາດຍົກເສດຖະກິດ ແລະ ວັດທະນະທຳຂອງຕົນຂຶ້ນສູ່ລະດັບສູງກວ່າເກົ່າ ໃນເວລາອັນສັ້ນໆ.ການ ເວົ້ົ້ົ້

ຄົມນິຍົມແຫ່ງໂລກ. ໃນປະຈຸບັນນີ້ ປະເທດສັງຄົມນິຍົມສ່ວນຫລວງຫລາຍ ທີ່ເປັນປະເທດທີ່ຫລ້າຫລັງໃນເມື່ອກ່ອນ ກໍ່ໄດ້ກັບກາຍມາເປັນລັດທີ່ຈະເລີນກ້າວ ຫນ້າ ແລະ ປະກອບດ້ວຍຂະແຫນງການອຸດສາຫະກຳອັນທັນສະໄຫມ, ທີ່ມີບົດ ບາດສຳຄັນ ຂະຫຍາຍອອກໄປນອກຂອບເຂດຂອງເສດຖະກິດແຫ່ງຊາດ.

ໄລຍະປະຈຸບັນແຫ່ງການຂະຫຍາຍຕົວຂອງລະບົບສັງຄົມນິຍົມແຫ່ງໂລກໄດ້ເປັນຂີດຫມາຍ ຂອງການກ້າວເດີນ ຂອງບັນດາປະເທດສັງຄົມນິຍົມໄປສູ່ເປົ້າ ຫມາຍລວມຢ່າງເລັ່ງລັດ ຄືເປົ້າຫມາຍສັງຄົມນິຍົມ ແລະ ກອມມູນິດນິຍົມຂອງ ການຍູ້ຫນູນຫມົດຫຸກໆປະເທດສັງຄົມນິຍົມ ໃຫ້ມີຄວາມສຸກງອມ ທາງດ້ານເສດ ຖະກິດ ແລະ ການເມືອງ ໃນລະດັບໃຫມ່ທີ່ສູງກວ່າເກົ່າ. ການສ້າງສາ ສັງ ຄົມນິຍົມ ແລະ ລະບອບກອມມູນິດ ໄດ້ສົ່ງຜົນກະທົບຮອບດ້ານອັນນັບມື້ ນັບສູງ ຂຶ້ນຢ່າງເນື້ອງນິດລຽນຕິດໄປສູ່ປະຊາຊົນ ຢູ່ໃນປະເທດທີ່ບໍ່ແມ່ນສັງຄົມນິຍົມ . ດ້ວຍຜົນສຳເລັດຂອງຕົນທາງດ້ານເສດຖະກິດ ສັງຄົມນິຍົມ ມີການກະທົບແບບ ເປັນຕົ້ນຕໍ ໃສ່ການຂະຫຍາຍຕົວຢູ່ໃນໂລກ ການຄາດຄະເນອັນນີ້ຂອງ ວ.ອີ. ເລນິນ ໄດ້ຮັບການຢັ້ງຢືນຢ່າງເຕັມປ່ຽມ ການເພີ່ມທະວີຜົນກະທົບດັ່ງກ່າວ - ແມ່ນຈຸດພິເສດອັນສຳຄັນຍິ່ງຂອງໄລຍະແຫ່ງການຂະຫຍາຍຕົວ ຂອງລະບົບສັງ ຄົມນິຍົມແຫ່ງໂລກໃນປະຈຸບັນ.

ມ. ກົນໄກແລະຮູບການຮ່ວມມືທາງດ້ານເສດຖະກິດ ລະຫວ່າງປະເທດສັງຄົມນິຍົມ

ການພົວພັນຊຶ່ງກັນແລະ ກັນທາງດ້ານເສດຖະກິດ ລະຫວ່າງປະເທດ ສັງ ຄົມນິຍົມ ແມ່ນການແລກປ່ຽນການເຄື່ອນໄຫວ ຂອງປະເທດດັ່ງກ່າວ ນຳກັນ ໂດຍຜ່ານ ການວິວັດແຫ່ງການແບ່ງງານສາກົນສັງຄົມນິຍົມ. ການແລກປ່ຽນ ການເຄື່ອນໄຫວຊຶ່ງກັນແລະກັນດັ່ງກ່າວ ມັນສະແດງອອກດ້ວຍລັກສະນະ ມີ ຫລາຍຮູບຫລາຍສີ ຂອງຮູບການຮ່ວມມືທາງດ້ານເສດຖະກິດ ແລະ ກໍ່ມີລັກສະ ນະເປັນໄປຢ່າງມີແຜນການ.

ຮູບການຮ່ວມມືທາງດ້ານເສດຖະກິດລະຫວ່າງປະເທດຕ່າງໆ ຢູ່ໃນລະບົບ ສັງຄົມນິຍົມແຫ່ງໂລກ ອັນເປັນພື້ນຖານແມ່ນ: ການປະສານສົມທົບ ແຜນການ

ພັດທະນາເສດຖະກິດແຫ່ງຊາດ, ການຊ່ວຍເຫລືອຊຶ່ງກັນ ແລະ ກັນທາງດ້ານເສດຖະກິດ ແລະ ເຕັກນິກ, ການຮ່ວມມືທາງດ້ານວິທະຍາສາດ - ເຕັກນິກ ແລະ ການແລກປ່ຽນບົດຮຽນ ໃນການກໍ່ສ້າງເສດຖະກິດ, ການຮ່ວມມືກັນໃນການກໍ່ສ້າງພະນັກງານ, ການຄ້າຕ່າງປະເທດ, ການຮ່ວມມື ທາງດ້ານການເງິນ-ເງິນຕາ.

ການປະສານສົມທົບ ແຜນການພັດທະນາເສດຖະກິດແຫ່ງຊາດ

ການແບ່ງງານສາກົນສັງຄົມນິຍົມ, ການແບ່ງເຂດການຜະລິດ ແລະ ການສຳພັນການຜະລິດ ລະຫວ່າງປະເທດສັງຄົມນິຍົມນຳກັນ ກຳນົດໃຫ້ປະເທດຕ່າງໆມີການພົວພັນເສດຖະກິດນຳກັນ ຢ່າງ ມີແຜນການ.

ໂດຍສອດຄ່ອງກັບກົດເກນວ່າດ້ວຍການຂະຫຍາຍຕົວ ຂອງ ເສດຖະກິດແຫ່ງຊາດຢ່າງມີແຜນການ ການຮ່ວມມືທາງດ້ານເສດຖະກິດລະຫວ່າງ ປະເທດສັງຄົມນິຍົມແມ່ນດຳເນີນໄປບົນພື້ນຖານການປະສານສົມທົບແຜນການ ພັດທະນາເສດຖະກິດແຫ່ງຊາດຊຶ່ງກັນແລະກັນ.

ການປະສານສົມທົບແຜນການພັດທະນາເສດຖະກິດແຫ່ງຊາດ ແມ່ນ ຮູບການອັນໃຫມ່ ໃນການເຄື່ອນໄຫວວາງແຜນການ ສົມທົບກັນ ຈຶ່ງມີແຕ່ຢູ່ໃນປະເທດສັງຄົມນິຍົມເທົ່ານັ້ນ. ຮູບການປະສານສົມທົບແຜນການ ເປັນເງື່ອນໄຂ ສາມາດປະສົມປະສານໄດ້ລະຫວ່າງ ຄວາມພະຍາຍາມ ໃນການພັດທະນາເສດຖະກິດແຫ່ງຊາດ ກັບ ຄວາມພະຍາຍາມລວມ ໃນການປັບປຸງ ແລະເປີດກ້ວາງ ລະບົບເສດຖະກິດສັງຄົມນິຍົມແຫ່ງໂລກ. ຍ້ອນມີການປະສານສົມ ທົບ ແຜນການ ຂະແໜງການຕ່າງໆ ໃນເສດຖະກິດຂອງລັດໃດໜຶ່ງສະເພາະ ທີ່ພົວພັນ ແລະ ປະສົມປະສານຊຶ່ງກັນແລະກັນນັ້ນ ຈຶ່ງມີການຂະຫຍາຍຕົວ ຢ່າງສົມສ່ວນດີຕາມທີ່ຄວນ, ລັດດັ່ງກ່າວ ຈຶ່ງມີການພົວພັນໃນພາກການໄລຍະຍາວນຳກັນຢ່າງໝັ້ນທ່ຽງ ແລະ ໄດ້ມີການຮັດໃຫ້ລະດັບການຂະຫຍາຍຕົວທາງດ້ານເສດຖະກິດ ໃນປະເທດຕ່າງໆ ສະໜ່ຳສະເໜີກັນ.

ລະຫວ່າງປະເທດສັງຄົມນິຍົມ ແມ່ນມີການປະສານສົມທົບນຳກັນ ກ່ອນອື່ນໝົດກໍ່ແມ່ນທາງດ້ານຕົວເລກກຳນົດໝາຍໃນແຜນການເສດຖະກິດ ໃນໄລຍະ

ຍາວນານຊຸ່ນ - ແຜນການຫ້າປີ ແລະ ແຜນການໃນໄລຍະຍາວນານກວ່ານີ້ອີກ.

ໃນເວລາຂໍ້ນແຜນການເສດຖະກິດຂອງຕົນ ແຕ່ລະປະເທດ ມີການປະສົມປະສານ ການພັດທະນາເສດຖະກິດຂອງຕົນເອງ ກັບ ການພັດທະນາເສດຖະກິດ ໃນປະເທດອື່ນໆ. ສິ່ງດັ່ງກ່າວເປັນການສ້າງໃຫ້ເກີດມີພື້ນຖານອັນແຫນ້ນແກ່ນ ເພື່ອຂະຫຍາຍການຮ່ວມມືຢ່າງຮອບດ້ານ ທາງດ້ານເສດຖະກິດ ລະຫວ່າງ ປະເທດສັງຄົມນິຍົມນຳກັນ ແລະ ເພື່ອຍູ້ຫນູນເສດຖະກິດໃນແຕ່ລະປະເທດ ແລະ ໃນທັງຫມົດລະບົບສັງຄົມນິຍົມແຫ່ງໂລກໃຫ້ສູງຂໍ້ນ.

ການປະສານສົມທົບແຜນການພັດທະນາເສດຖະກິດແຫ່ງຊາດ ເປີດໂອ - ກາດ ໃຫ້ບັນດາປະເທດສັງຄົມນິຍົມ ສາມາດວາງອັດຕາສ່ວນຂະຫຍາຍຕົວອັນຖືກຕ້ອງລະຫວ່າງຂະແຫນງການຕ່າງໆ ແຫ່ງການຜະລິດ ບໍ່ສະເພາະພຽງແຕ່ຢູ່ໃນຂອບເຂດປະເທດໃດປະເທດຫນຶ່ງເທົ່ານັ້ນ ແຕ່ກໍ່ຍັງແມ່ນຢູ່ໃນຂອບ ເຂດ ລະຫວ່າງປະເທດອີກ. ການວາງອັດຕາສ່ວນອັນຖືກຕ້ອງເຫມາະສົມ ດັ່ງກ່າວ ປະຕິບັດໄປບົນພື້ນຖານການຕົກລົງເຫັນດີຖານສະຫາຍນຳກັນ ດ້ວຍການ ເຊັນ ສັນຍາແບບສະເຫມີພາບ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ລະຫວ່າງ ປະເທດສັງຄົມນິຍົມນຳກັນ.

ໃນການປະສົມປະສານແຜນການເສດຖະກິດນຳກັນ ມັນມີການຄຳນຶ່ງເຖິງ ຄວາມອາດສາມາດໃນການຜະລິດ ແລະ ຄວາມຮຽກຮ້ອງຕ້ອງການຂອງເສດ ຖະກິດ ແລະ ປະຊາຊົນ ໃນແຕ່ລະປະເທດ, ເຖິງສິດຜົນປະໂຫຍດໃນ ການ ຍູ້ຫນູນຄວາມເຂັ້ມແຂງທາງດ້ານເສດຖະກິດ ຂອງແຕ່ລະປະເທດຂໍ້ນ, ໃນການ ປັບປຸງເອກະລາດ, ໃນການເພີ່ມທະວີລະດັບຊີວິດການເປັນຢູ່ທາງດ້ານວັດຖຸ- ແລະ ວັດທະນະທຳ ຂອງຊາວຜູ້ອອກແຮງງານໃຫ້ສູງຂໍ້ນ.

ການປະສົມປະສານແຜນການພັດທະນາເສດຖະກິດ ຂອງປະເທດສັງຄົມນິ ຍົມ ໃນໄລຍະຍາວນານ ເປັນການເປີດຊ່ອງທາງ ໃຫ້ມີຄວາມອາດສາມາດ- ອັນກວ້າງຂວາງ ໃນການນຳໃຊ້ທ່າດີເລີດຂອງການແບ່ງງານ ສາກົນສັງຄົມນິ ຍົມ ໃຫ້ມີປະສິດທິຜົນກວ່າເກົ່າ ແລະ ກໍ່ທັງຮັບປະກັນເຮັດໃຫ້ກຳລັງ ການຜະ ລິດຂອງທັງຫມົດລະບົບເສດຖະກິດ ສັງຄົມນິຍົມແຫ່ງໂລກ ແລະ ຂອງແຕ່ ລະ ປະເທດ ມີການຂະຫຍາຍຕົວຢ່າງສຸດຂີດ, ທັງນີ້ໂດຍມີການຄຳນຶ່ງເຖິງເງື່ອນ

ໄຂທາງດ້ານທຳມະຊາດ ແລະ ດ້ານເສດຖະກິດກໍ່ຄືຄຳນຶງເຖິງຈຸດພິເສດ ປະ ຈຳຊາດ ຂອງແຕ່ລະປະເທດ.

ການປະສົມປະສານໂຄງການຜະລິດ ບົນພື້ນຖານການຕົກລົງເຫັນດີ ລະ ຫວ່າງສອງຝ່າຍ ແລະ ລະຫວ່າງຫລາຍຝ່າຍນຳກັນ ເຄີຍໄດ້ຮັບການປະຕິບັດ ຢ່າງກ້ວາງຂວາງ. ໃນນີ້ມີການວາງ ແລະ ການປະຕິບັດ <u>ໂຄງການຮ່ວມມືໃນ ໄລຍະຍາວນານແບບມີທິດເລັ່ງຄັກແນ່</u> ຢູ່ໃນຂະແຫນງການອັນສຳຄັນຍິ່ງແຫ່ງ ການຜະລິດ ແມ່ນມີຄວາມຫມາຍສຳຄັນທີ່ສຸດ. ຈຸດປະສົງຂອງໂຄງການດັ່ງ - ກ່າວແມ່ນວ່າ: ດ້ວຍການໃຊ້ຄວາມພະຍາຍາມລວມ ເພື່ອຮັບປະກັນການສະ ຫນອງຄວາມຮຽກຮ້ອງຕ້ອງການ ອັນທະວີຄູນຂຶ້ນຢ່າງ ໄວວາທາງດ້ານພະ ລັງງານ, ເຊື້ອເພີງ, ວັດຖຸດິບຊະນິດຕົ້ນຕໍ, ເສີມຂະຫຍາຍຂະແຫນງການ- ອຸດສາຫະກຳກໍ່ສ້າງເຄື່ອງຈັກ ແລະ ການຂົນສົ່ງຢ່າງເລັ່ງລັດ, ຕອບສະ- ຫນອງຢ່າງເຕັມສ່ວນກວ່າເກົ່າ ຄວາມຕ້ອງການທາງດ້ານສິນຄ້າ ໃຊ້ສອຍທົ່ວ ໄປທີ່ເປັນສິນຄ້າປະເພດ ອຸດສາຫະກຳ ແລະ ສະບຽງອາຫານ.

ເພື່ອຈຸດປະສົງຈັດຕັ້ງການຮ່ວມມືທາງດ້ານເສດຖະກິດແບບມີແຜນການລະ ຫວ່າງປະເທດສັງຄົມນິຍົມ ບົນພື້ນຖານຫລັກການສະເຫມີພາບ ຢ່າງເຕັມສ່ວນ ລະຫວ່າງບັນດາປະເທດສະມາຊິກ, ໃນປີ ຈພ.ຜ.ຜ ໄດ້ມີການຈັດຕັ້ງສະພາຊ່ວຍ ເຫຼືອຊຶ່ງກັນແລະກັນທາງດ້ານເສດຖະກິດ (ແສັບ), <u>ສະພາຊ່ວຍເຫຼືອຊຶ່ງກັນແລະ ກັນທາງດ້ານເສດຖະກິດ</u>ແມ່ນອົງການເສດຖະກິດລະຫວາງລັດຖະບານ ຂອງ ປະເທດສັງຄົມນິຍົມ. ແສັບ ມີຫນ້າທີ່ສ້າງເງື່ອນໄຂໃຫ້ສາມາດເສີມຂະ - ຫຍາຍໄດ້ຢ່າງຮອບດ້ານ ຮູບການຕ່າງໆແຫ່ງການຮ່ວມມືທາງດ້ານເສດຖະກິດ ລະຫວ່າງປະເທດສັງຄົມນິຍົມ ແລະ ການເຄື່ອນໄຫວວາງແຜນການສົມທົບກັນ; ອົງການນີ້ ມີຫນ້າທີ່ຊ່ວຍຊຸກຍູ້ການສຳພັນ ແລະ ການແບ່ງເຂດການຜະລິດ , ການສົມທົບກັນກໍ່ສ້າງ ແລະ ນຳໃຊ້ກິດຈະການອຸດສາຫະກຳ ແລະ ຂົນສົ່ງ , ການແລກປ່ຽນສິນຄ້ານຳກັນ, ການໄລ່ລຽງສາກົນ. ນອກນັ້ນຍັງມີຫນ້າທີ່ ຈັດ ຕັ້ງການແລກປ່ຽນບົດຮຽນທາງດ້ານເສດຖະກິດ ແລະ ເຕັກນິກ, ໃຫ້ ການ ຊ່ວຍເຫລືອຊຶ່ງກັນແລະກັນເປັນວັດຖຸ, ສະບຽງອາຫານ, ເຄື່ອງຈັກ, ອຸປະ ກອນ, ປະຕິບັດການປະສົມປະສານແຜນການເຂົ້າກັນ ແລະ ການປະສານສົມ ທົບ ການຂະຫຍາຍຕົວທາງດ້ານເສດຖະກິດ ຂອງບັນດາປະເທດ ສັງຄົມນິຍົມ

ບົນພື້ນຖານການແບ່ງງານຢ່າງຖືກຕ້ອງເໝາະສົມ ລະຫວ່າງປະເທດດັ່ງກ່າວ ນຳກັນ.

ປະເທດສະມາຊິກສະພາມີດັ່ງນີ້ : ບຸນກາລີ, ຮົງກາລີ, ຫວຽດນາມ , ສ.ປ.ຢ, ກຸຍບາ, ມົງໂກລີ, ໂປໂລຍ, ຣູມານີ, ສ.ສ.ສ. ແລະ ເຊັກໂກສະໂລວາກີ. ນັບແຕ່ປີ ໑໙໖໔ ເປັນຕົ້ນມາ ຢູໂກສະລາວີກໍເຂົ້າຮ່ວມ ໃນການເຄື່ອນໄຫວ ວຽກງານຂອງ ແສັບ ທາງດ້ານບັນຫາຊຶ່ງເປັນທີ່ໜ້າສົນໃຈສຳລັບທຸກຝ່າຍ. ນອກຈາກນີ້ກໍຍັງມີຜູ້ຕາງໜ້າຂອງສາທາລະນະລັດປະຊາທິປະໄຕ ປະຊາຊົນ ເກົາຫລີ, ລາວ, ອົງໂກລາ, ເອທິໂອປີ ເຂົ້າຮ່ວມວຽກງານຂອງບາງອົງການ ຢູ່ໃນ ແສັບ ໃນຖານະເປັນຜູ້ສັງເກດການ.

ອີງຕາມກົດລະບຽບແລ້ວ ວັດຖຸປະສົງຕົ້ນຕໍ ຂອງອົງການຈັດຕັ້ງສາກົນດັ່ງ ກ່າວ ແມ່ນການຕ້ານໂຮມ ແລະ ການປະສານສົມທົບກຳລັງແຮງຂອງປະເທດ ສະມາຊິກ ເພື່ອຊຸກຍູ້ເສດຖະກິດແຫ່ງຊາດ ຂອງປະເທດດັ່ງກ່າວ ໃຫ້ ຂະ ຫຍາຍຕົວໄປຢ່າງມີແຜນການ, ຊຸກຍູ້ຄວາມກ້າວໜ້າ ທາງດ້ານເສດຖະກິດ ແລະເຕັກນິກຢ່າງເລິ່ງລັດ, ຊຸກຍູ້ຈັງຫວະໃນການຫັນປ່ຽນໄປເປັນອຸດສາຫະ-ກຳ ຂອງບັນດາປະເທດທີ່ລະດັບຂະຫຍາຍຕົວຕ່ຳກວ່າ ທາງດ້ານອຸດສາ ຫະ ກຳ, ຊຸກຍູ້ເຮັດໃຫ້ສະມັດຖະພາບ ຂອງການອອກແຮງງານເພີ່ມຂຶ້ນ ຢ່າງ ເນື່ອງນິດລຽນຕິດ ແລະ ໃຫ້ລະດັບຄວາມຢູ່ດີກິນດີຂອງປະຊາຊົນ ປະເທດສະ ມາຊິກ ແສັບ ເພີ່ມຂຶ້ນຢ່າງບໍ່ຢຸດຢັ້ງ. ຫລັກການຕ່າງໆກ່ຽວກັບການພົວພັນສາ ກົນແບບໃໝ່ ທາງດ້ານເສດຖະກິດ ເຊັ່ນ ຫລັກການຮ່ວມມື ແບບສັງຄົມນິຍົມ ແລະ ຫລັກການສາກົນສັງຄົມນິຍົມ, ຫລັກການສະເໝີພາບກັນຢ່າງເຕັມ - ສ່ວນ, ຫລັກການຊ່ວຍເຫລືອຊຶ່ງກັນແລະກັນ ເພື່ອແໃສ່ຮັບໃຊ້ ການຍົກ ລະ ດັບລວມຂຶ້ນຢ່າງບໍ່ຢຸດຢັ້ງນັ້ນ ລ້ວນແຕ່ໄດ້ຮັບການປະຕິບັດ ໃນພາກການຈັດຕັ້ງ ວຽກງານຂອງ ແສັບ.

ອະທິປະໄຕ ແລະ ສິດສະເໝີພາບ ລະຫວ່າງປະເທດຕ່າງໆ ຢູ່ໃນ ອົງ ການ ແສັບ ໄດ້ຮັບການຮັບປະກັນ ດ້ວຍການມີຕົວແທນຈຳນວນເທົ່າທຽມກັນຢູ ໃນສະພາ, ດ້ວຍການຮັບຮອງເອົາການສະ ເໝີແນະ ແລະ ມະຕິຕົກລົງ ຕ່າງໆ ຜ່ານການຕົກລົງຊັ້ນດີຂອງໝົດທຸກປະເທດທີ່ກ່ຽວຂ້ອງ, ດ້ວຍການມີ ສິດທິ ແລະ ມີພັນທະເທົ່າທຽມກັນຕໍ່ສະພາ ແລະ ໃນການພົວພັນຊຶ່ງກັນ ແລະ ກັນ.

ແສັບ ແມ່ນອົງການຈັດຕັ້ງສາກົນ ທີ່ເປີດປະຕູຂອງຕົນໃຫ້ແກ່ປະເທດອື່ນໆ ທຸກປະເທດ ທີ່ເຫັນດີເຫັນພ້ອມນຳ ວັດຖຸປະສົງ ແລະ ຫລັກການເຄື່ອນໄຫວ ຂອງສະພາ ແລະ ມີຈຸດປະສົງຢາກເຂົ້າຮ່ວມໃນສະພາ ບົນພື້ນຖານຫລັກການ ດັ່ງກ່າວ.

ອົງການຂັ້ນສູງສຸດຂອງສະພາ ແມ່ນກອງປະຊຸມໃຫຍ່ ທີ່ມີການເປີດຂຶ້ນ ຢູ່ ນະຄອນຫລວງຂອງປະເທດ ສະມາຊິກ ແສັບ ໂດຍຜັດປ່ຽນຜ່ຽນກັນ. ແມ່ນ ຄະນະຜູ້ແທນ ຜູ້ມີສິດອຳນາດເຕັມ ທີ່ເຂົ້າຮ່ວມໃນວຽກງານກອງປະຊຸມ ໃຫຍ່ ຂອງ ແສັບ.

ຢູ່ໃນກອງປະຊຸມໃຫຍ່ ມີການແກ້ໄຂບັນຫາໃຫຍ່ໆ ກ່ຽວກັບການລົງ ເລິກ ໃນການພົວພັນເສດຖະກິດລະຫວ່າງປະເທດ ທີ່ເຂົ້າຮ່ວມໃນອົງການຈັດຕັ້ງດັ່ງ ກ່າວ. ໄລຍະອັນສຳຄັນໃນການຂະຫຍາຍຕົວຂອງປະເທດ-ສະມາຊິກ ແສັບ ໄດ້ແກ່ການຮັບຮອງເອົາໂຄງການຄົບຊຸດ ໃນປີ ໑໙໗໑ ກ່ຽວກັບການສືບຕໍ່ລົງ ເລິກ ແລະ ປັບປຸງດັດແກ້ການເສີມຂະຫຍາຍ ການສົມຮ່ວມເສດຖະກິດ ຂອງ ປະເທດ-ສະມາຊິກ ແສັບ ຊຶ່ງໄດ້ມີການຄາດຄະເນໄວ້ສຳລັບ ໑໕ ຫາ ໘໐ປີ.

ໃນໄລຍະລະຫວ່າງກອງປະຊຸມໃຫຍ່ສອງສະໄໝ ຄະນະກຳມະການ ບໍລິ ຫານງານ ທີ່ປະກອບດ້ວຍຜູ້ຕາງໜ້າຂອງປະເທດສະມາຊິກ ແສັບ ມີການ - ໂຮມປະຊຸມເປັນຫລາຍໆຄັ້ງ ໃນປີໜຶ່ງ. ຄະນະບໍລິຫານງານມີໜ້າທີ່ຮັບ ຜິດ ຊອບ ກ່ຽວກັບການປະຕິບັດໜ້າທີ່ຕ່າງໆ ຂອງສະພາໃຫ້ປະກົດເປັນຈິງ ແລະ ກ່ຽວກັບການກວດກາພາກປະຕິບັດມະຕິຕົກລົງ ຂອງອົງການຕ່າງໆໃນ ແສັບ. ຄະນະບໍລິຫານງານເປັນຜູ້ຊຸມນຳວຽກງານຂອງກອງເລຂາ ແສັບ ແລະ ຄະນະ ກຳມາທິການປະຈຳການ ກ່ຽວກັບການຮ່ວມມືທາງດ້ານເສດຖະກິດ ແລະວິທະ ຍາສາດ-ເຕັກນິກ. ສູນບັນຊາການຂອງ ແສັບ ແມ່ນຕັ້ງຢູ່ເມືອງ ມົດສະກູ - ນະຄອນຫລວງຂອງ ສ.ສ.ສ.ຊ.

ກອນສົມຮ່ວມເສດຖະກິດຂອງປະເທດສັງຄົມນິຍົມ ຮຽກຮ້ອງໃຫ້ມີການຈັດ ຕັ້ງ ການປະສານສົມທົບແຜນການພັດທະນາເສດຖະກິດແຫ່ງຊາດ ໃນໄລ ຍະ ຍາວນານ ຢ່າງມີປະສິດທິຜົນສູງ, ມີການປະສົມປະສານນະໂຍບາຍເສດຖະ- ກິດນຳກັນ ແລະ ມີການສົມທົບກັນ ຄາດຄະເນທາງດ້ານເສດຖະກິດ ກ່ຽວກັບ ການຂະຫຍາຍຕົວຂອງຂະແໜງການ ແລະ ປະເພດການຜະລິດອັນສຳຄັນຍິ່ງ.

ການເພີ່ມທະວີການເຄື່ອນໄຫວວາງແຜນການສົມທົບກັນ ກຳນົດໃຫ້ມີການວາງແຜນການແຫ່ງຊາດ ຢ່າງມີວິທະຍາສາດໃນລະດັບສູງ ແລະ ມີການປະຕິບັດແຜນການດັ່ງກ່າວຢ່າງເຂັ້ມງວດ, ມີຄວາມເປັນ ເອກະພາບກັນ ທາງ - ດ້ານວິທີການພົ້ນຖານກ່ຽວກັບການວາງແຜນການ ແລະ ການຈັດຕັ້ງວຽກງານສະຖິຕິ, ມີຄວາມສາມາດສົມທຽບຕົວເລກຄາດໝາຍອັນຕົ້ນຕໍ ຂອງແຜນການພັດທະນາເສດຖະກິດແຫ່ງຊາດນຳກັນໄດ້, ມີການສົມທົບກັນລົ້ນລ້ວາງຂໍ້ມູນກ່ຽວກັບການຜະລິດ ແລະ ການຊົມໃຊ້ຜະລິດຕະພັນອຸປະນິດສຳຄັນຍ່ງ ຢູ່ ໃນໜົດທຸກປະເທດສັງຄົມນິຍົມ ຫລືຢູ່ໃນໝວດປະເທດທີ່ກ່ຽວຂ້ອງ.

ການປະສານສົມທົບ ການຂະຫຍາຍຕົວຢ່າງມີແຜນການທາງດ້ານເສດຖະກິດ ຢູ່ໃນປະເທດສັງຄົມນິຍົມ ແມ່ນກຳເນີດຂຶ້ນມາຈາກກະໂຕທາດແທ້ຂອງສັງຄົມນິຍົມ ແລະ ມັນກໍ່ສອດຄ່ອງກັບສິດຜົນປະໂຫຍດອັນພົ້ນຖານ ຂອງຊາວ ຜູ້ອອກແຮງງານ ໃນປະເທດທີ່ນອນຢູ່ໃນລະບົບສັງຄົມນິຍົມແຫ່ງໂລກ.

ໃນໄລຍະປະຈຸບັນແຫ່ງການຂະຫຍາຍຕົວ ຂອງລະບົບເສດຖະກິດສັງຄົມນິຍົມແຫ່ງໂລກ ແມ່ນກະໂຕເອີດເອງ ທີ່ໄດ້ວາງໜ້າທີ່ໃໝ່ອອກມາ ນັ້ນກໍ ຄືໜ້າທີ່ເອົາການປະສົມປະສານ ທັງໝົດນະໂຍບາຍເສດຖະກິດ ໄປສົມທົບໃສ່ການປະສານສົມທົບແຜນການ. ບັນຫາທີ່ຍົກຂຶ້ນມາແກ້ໄຂ ໃນປະຈຸບັນມີຄືບັນຫາການເຮັດໃຫ້ໂຄງປະກອບກົນໄກເສດຖະກິດ ຫຍັບເຂົ້າໃກ້ກັນ, ບັນຫາການສືບຕໍ່ເສີມຂະຫຍາຍການພົວພັນກັນໂດຍກົງ ລະຫວ່າງກະຊວງ, ສະຫະບໍລິສັດ ແລະ ວິສາຫະກິດ ທີ່ເຂົ້າຮ່ວມໃນການສຳພັນ, ບັນຫາການສ້າງຕັ້ງຮູບການ-ປະສົມກັນ, ນອກຈາກນີ້ກໍອາດຈະມີຮູບການຕ່າໂຮມໜ້ອແຮງ ແລະ ຊັບພະຍາກອນຂອງພວກເຮົາ ແລະ ຮູບການອື່ນໆອີກ.

ການຊ່ວຍເຫລືອຊຶ່ງກັນ ແລະ ກັນ ທາງດ້ານເສດຖະກິດແລະເຕັກນິກ

ການຊ່ວຍເຫລືອຊຶ່ງກັນ ແລະ ກັນ ທາງດ້ານເສດຖະກິດແລະເຕັກນິກ

ໃນການກໍ່ສ້າງກິດຈະການຕ່າງໆທີ່ມີຄວາມຈຳເປັນ ສຳລັບເສດຖະກິດແຫ່ງຊາດ ມີຄວາມໝາຍສຳຄັນຢ່າງໃຫຍ່ຫລວງ ເພື່ອເສີມຂະຫຍາຍອຸດສາຫະກຳ, ການກະສິກຳ ແລະ ຂະແໜງ - ການເສດຖະກິດອື່ນໆ ໃນບັນດາປະເທດສັງຄົມນິຍົມ.

ໂດຍປະຕິບັດຕາມສັນຍາທີ່ໄດ້ເຊັນກັນ ລະຫວ່າງລັດ ແລະ ໂດຍໄດ້ ຮັບ ການຊ່ວຍເຫລືອທາງດ້ານເຕັກນິກ ຈາກສະຫະພາບໂຊວຽດ ມາຮອດຕົ້ນ ປີ ໑໙໘໑ ຢູ່ໃນບັນດາປະເທດສັງຄົມນິຍົມ ໄດ້ມີການກໍ່ສ້າງໃຫ້ສຳເລັດ ແລະ ພວມມີການກໍ່ສ້າງ ວິສາຫະກິດ, ເຂຕາສະຖານ ແລະ ກິດຈະການອື່ນໆ ອີກ ໃນໄລຍະພາຍຫລັງສົງຄາມ ເປັນຈຳນວນທັງຫມົດ ມ.໐໐ຝ ແຫ່ງ ຊຶ່ງໃນນັ້ນ ໑.໘໘໔ ແຫ່ງໄດ້ຖືກນຳໃຊ້ເຂົ້າໃນການຜະລິດ. ໃນຈຳນວນດັ່ງກ່າວ ໄດ້ ມີ ທັງຫມົດ ๘.๔๐ກ ກິດຈະການທີ່ໄດ້ມີການສ້າງຂຶ້ນ ແລະ ພວມມີ ການ ສ້າງ ຂຶ້ນ ຢູ່ໃນປະເທດສະມາຊິກ ແສັບ ແລະ ກໍ່ໄດ້ມີກິດຈະການຈຳນວນ ๑.๔໙๔ ແຫ່ງ ທີ່ໄດ້ຖືກນຳໃຊ້ເຂົ້າໃນການຜະລິດແລ້ວ.

ພຽງແຕ່ໃນໄລຍະປະຕິບັດແຜນການຫ້າປີເທື່ອທີ ๑๐(ປີ ໑໙ກ໘-໑໙໘໐) ສະຫະພາບໂຊວຽດ ໄດ້ຈັດສົ່ງອຸປະກອນຄົບຊຸດ ໄປປະເທດສັງຄົມນິຍົມອື່ນໆ ເພື່ອປະກອບເຂົ້າໃສ່ກິດຈະການໃນເຂດຖະກິດແຫ່ງຊາດ ຈຳນວນ ໙๔๔ແຫ່ງ ຊຶ່ງໃນນັ້ນ ໄດ້ມີ ๔๑๘ ກິດຈະການທີ່ໄດ້ຖືກກໍ່ສ້າງໃຫ້ສຳເລັດຢ່າງຕັ້ມສ່ວນ ຫລືສຳເລັດເປັນພາກສ່ວນ. ນອກຈາກນີ້ ປະເທດສັງຄົມນິຍົມອື່ນໆ ກໍ່ຍັງ ໄດ້ ຊ່ວຍເຫລືອຊຶ່ງກັນ ແລະ ກັນທາງດ້ານເຂດຖະກິດ ຢູ່ໃນຂອບເຂດອັນກ້ວາງ-ຂວາງ. ຍົກຕົວຢ່າງ ເຊັກໂກສະໂລວາກີ ໄດ້ຈັດສົ່ງອຸປະກອນ ເພື່ອໄປປະ ກອບໃຫ້ກິດຈະການຢູ່ ບູນກາລີ, ຣູມານີ ແລະ ກຸຍບາ, ສ.ປ.ຢ, ບູນກາລີ, ຣົງກາລີ ແລະ ໂປໂລຍ ກໍ່ໄດ້ໃຫ້ການຊ່ວຍເຫລືອສະໜັບສະໜູນທາງດ້ານ-ເຕັກນິກ ເຂດຖະກິດ ແກ່ຫວຽດນາມ.

ຢູ່ໃນໂຄງການຮ່ວມມືໄລຍະຍາວນານ ໂດຍມີທິດລ່ຽງຢ່າງຄັກແນ່ ໃນ ດ້ານພະລັງງານໄຟຟ້າ, ເຊື້ອເພີງ ແລະ ວັດຖຸດິບ ໄດ້ມີການກຳນົດ ໃຫ້ດຳ ເນີນມາດຕະການຄົບຊຸດ ເພື່ອຊ່ວຍຍູ້ໜູນ ໃຫ້ມີການຕອບສະໜອງ ຄວາມ ຮຽກຮ້ອງຕ້ອງການ ອັນຖືກຕ້ອງເໝາະສົມ ຂອງປະເທດສະມາຊິກ ແສັບໃຫ້ ໄດ້ ກຽມພ້ອມ ຊຸບພະຍາກອນທາງດ້ານເຊື້ອເພີງ ແລະ ວັດຖຸດິບ. ທິດທາງ ອັນສຳຄັນຍິ່ງກຽວພັນກັບການຮ່ວມມື ແມ່ນບັນຫາການກໍ່ສ້າງ ສະຖານີໄຟຟ້າ ປະ ລະມານູ ຢູ່ໃນປະເທດ ສະມາຊິກ ແສັບ ໂດຍໄດ້ຮັບການຊ່ວຍເຫລືອທາງ - ດ້ານເຕັກນິກ ຈາກສະຫະພາບໂຊວຽດ. ຮອດປີ ໑໙໙๐ ກຳລັງແຮງ ລວມ ຍອດ ຂອງສະຖານີເຫລົ່ານີ້ ຈະຕ້ອງໃຫ້ໄດ້ປະມານ ๓ກ ລ້ານກິໂລວັດ. ອີງ

ตามภาษคิดไล่แล้ว ภาษเลื่มตื้นนำใจ้ สะถานีไฟฟ้าปะละมานูเอี้ำใน ภาษผะลิด จะจ่วยใช้สามาดปะยัดเจื้อเผิง ที่ทฐบเท่า น้ำมันเจื้อไฟ ได้ปะมาน ๓๐ ล้านโต่นในปีหนึ่ง. นอกจากนี้ ภาษยิกเลิก ภาษ อิน สิ่งเจื้อเผิงในไลยะไก เพื่อธับใจ้สะถานีไฟฟ้า แล่นด้วยอายธ้อน ก็ เป็นภาษปะกอบใช้มีภาษปะยัดย่างหลวงหลาย.

ภาษสิมทิบกันก็สำงวิสาหะกิด มีบิดบาดอันสำคัน ในละบิบภาษพิว พัน เสดถะกิดของบันดาปะเทดสังคิมนิยิม. นี้แม่นหนึ่งในบันดา ธูบ ภาษธ่วมมีทางด้านเสดถะกิด แบบใหม่ ที่มีอะนาคิดกว้างไกที่สุด.ติว ย่าง ก็คืภาษก็สำงละบิบพะลังงานไฟฟ้า "มิธ" ที่เต้าโธมละบิบ พะลังงานไฟฟ้าของเจักโกสะโลวากี, โปโลย, ธิงกาลี, ส.ป.ย, ขดพากตาเวันติกของ ส.ส.ส.จ และ ธูมานี เอี้ำกัน. ด้วย กำ ลังแธงของสะหะพาบโจวฐด, โปโลย, เจักโกสะโลวากี, ส.ป.ย และ ธิงกาลี ก็ได้มีภาษก็สำงห์สิ่งน้ำมัน "ดธุจบา " เพื่อสิ่ง น้ำมัน จาก ส.ส.ส.จ ไปปะเทดดั่งก่าว, ห์สิ่งอายแกัด "โจยูส " ที่ จัด สิ่งอายแกัดจาก ส.ส.ส.จ ไป ส.ป. บูนกาลี, ส.ป.ธิงกาลี , ส.ป. เยยละมัน, ส.ป. โปโลย, ส.ส.ธูมานี และ ส.ส.เจักโก สะโลวากี ก็มีภาษเคื่อนไหวย่างมีผินดี.

ภาษเจันสันยาว่าด้วยภาษสิมทิบกัน ก็สำงกิดจะภาษขะหนาดใหย่ พาไปเถิงบ่อนมีภาษแบ่งเขดภาษผะลิดย่างหมั้นท่ฐง และ มีภาษ สำ พันภาษผะลิด.

ภาษธ่วมมี ทางด้าน วิทะยาสาด-เตักนิก

ภาษแลกป่ฐนผินสำเลัดทางด้านวิทะยาสาด เตักนิก และ บิดธฐนอันนำหน้าในภาษ ผะ ลิด นับมี้นับได้มีภาษขะหยายติวย่าง กว้าง ขวางกว่าเก่า ในภาษพิวพันละหว่างปะเทดต่างๆยู่ในละบิบ สังคิมนิ ยิมแห่งโลก. นักวิทะยาสาด ยู่ในปะเทดสังคิมนิยิม มีภาษสิมทิบ กัน ย่างสะหนิดแหน้น ในภาษแก้ไขบันหา อันสำคันยิ่ง ทางด้านวิทะยา- สาด และ เตักนิก. ได้มีอิงภาษจัดตั้งคิ้นคว้าวิทะยาสาด, อิงภาษ-

ຈັດຕັ້ງ ວາງແຜນອອກແບບແລະສະຖາບັນຕ່າງໆ ເປັນຈຳນວນຫລາຍກວ່າ ມ ພັນແຫ່ງ ຢູ່ໃນປະເທດສະມາຊິກ ແສັບ ທີ່ເຂົ້າຮ່ວມໃນການຮ່ວມມືແບບຫລາຍ ຝ່າຍທາງດ້ານວິທະຍາສາດ-ເຕັກນິກ ຊຶ່ງໃນນັ້ນ ມີສະຖາບັນ ວິທະຍາສາດ ຂອງສະພາບັນດິດ ວິທະຍາສາດປະມານ ८०० ແຫ່ງ.

ການຮ່ວມມືທາງດ້ານວິທະຍາສາດ-ເຕັກນິກ ແມ່ນດຳເນີນໄປພາຍໃຕ້ຮູບ ການແລກປ່ຽນນຳກັນ ກ່ຽວກັບພົນສະທ້ອນ ອັນສຳຄັນຍິ່ງ ທາງດ້ານ ວິທະຍາ ສາດ, ເຕັກນິກ ແລະ ເອກະສານວາງແຜນ-ເຕັກນິກຕ່າງໆ, ຮູບການຊ່ວຍ ເຫລືອ ໃນການດຳເນີນວຽກງານວາງແຜນ, ສຳຫລວດທໍລະນີສາດ ແລະທົດ ລອງ ແລະ ຮູບການແລກປ່ຽນບົດຮຽນ, ຊ່ວຍເຫລືອໃນການກໍ່ສ້າງພະນັກ - ງານ ແລະ ໃນການຍົກລະດັບຄວາມຊຳນິຊຳນານຂອງພະນັກງານອົ້ມ ແລະ ອົ້ນໆ.

ໃນເບື້ອງຕົ້ນຂອງການຮ່ວມມື ທາງດ້ານວິທະຍາສາດ-ເຕັດນິກ ກໍ່ມີແຕ່ ບັນຫາການສົ່ງບົດຮຽນເຕັກນິກ ແລະ ເອກະສານກ່ຽວກັບເຕັກນິກຊະນິດ ທີ່ມ ການນຳໃຊ້ແລ້ວນັ້ນໃຫ້ກັນເປັນຕົ້ນຕໍ. ຜ່ານການຂະຫຍາຍຕົວ ຂອງການ ສົ ຮ່ວມແສດຖະກິດ ການຮ່ວມມືທາງດ້ານວິທະຍາສາດ-ເຕັກນິກ ກໍ່ໄດ້ສຸມໃສ່ ການຄົ້ນຄ້ວາບັນຫາໃຫມ່ໆ ກ່ຽວກັບຄວາມກ້າວໜ້າທາງດ້ານວິທະຍາສາດ - ເຕັກນິກ ໂດຍມີການສົມທົບລະຫວ່າງປະເທດຕ່າງໆນຳກັນ. ໃນດ້ານ ຄວາມ ກ້າວໜ້າທາງດ້ານເຕັກນິກ ການປະສານສົມທົບວຽກງານຄົ້ນຄ້ວາວິທະຍາ - ສາດ ຄືແນວນົ ມີລັກສະນະ ເປັນກົດເກນຢ່າງພາວະວິໄສ ເພາະວ່າມີແຕ່ອົງ ໃສ່ ຄວາມພະຍາຍາມລວມກັນເທົ່ານັ້ນ ຈຶ່ງຈະສາມາດຄົ້ນຄ້ວາບັນຫາທາງ - ດ້ານວິທະຍາສາດ ແລະ ເຕັກນິກ ປະເພດທັນສະໄໝ ແລະ ມີການຕິດພັນ ກັນນັ້ນ ໄດ້ຢ່າງໄວວາ ແລະ ຢ່າງມີປະສິດທິພົນ ໂດຍຫລີກເວັ້ນບໍ່ໃຫ້ເກີດ ມີ ການຊ້ຳຮອຍກັນ ແບບບໍ່ຈຳເປັນ.

ແບບຢ່າງອັນເດ່ັ່ນຊັດແຫ່ງການຮ່ວມມືຢ່າງມີປະສິດທິພົນ ທາງດ້ານວິທະ- ຍາສາດ-ເຕັກນິກລະຫວ່າງປະເທດສະມາຊິກ ແສັບ ແມ່ນການຮ່ວມມື ຂອງ ພວກເຂົາເຈົ້າ ໃນດ້ານອະວະກາດ. ໂດຍສອດຄ່ອງກັບໂຄງການ " ອິນແຕ ໂກສໂມສ " ກໍ່ໄດ້ມີການສົ່ງ ໜ່ວຍບິນອະວະກາດສາມົ ຂົ້ນອະວະກາດ . ໃນການບິນອະວະກາດດັ່ງກ່າວ ກໍ່ໄດ້ມີນັກບິນ ອະວະກາດ ປະເທດສັງຄົມນິ

ยิมอื่ນໆ ເຂົ້າຮ່ວມສົມທົບ ກັບນັກບົນອະວະກາດໂຊວຽດ.

ການແລກປ່ຽນນຳກັນຢ່າງກວ້າງຂວາງ ລະຫວ່າງປະເທດ ສັງຄົມນິຍົມ ກ່ຽວກັບຜົນສຳເລັດທາງດ້ານວິທະຍາສາດ-ເຕັກນິກ ແລະ ບົດຮຽນອັນກ້າວ-ຫນ້າໃນການຜະລິດ ເປັນການຊ່ວຍຍູ້ຫນູນໃຫ້ກຳລັງການຜະລິດ ໄດ້ຂະຫຍາຍຕົວ ບົນພື້ນຖານເຕັກນິກລະດັບສູງສຸດ. ປະເທດສັງຄົມນິຍົມ ລ້ວນແຕ່ຖືວ່າ - ການເສີມຂະຫຍາຍຮູບການພົວພັນ ຊຶ່ງກັນແລະກັນ ທາງດ້ານສາກົນຄືແນວ ນີ້ແມ່ນຜົນປະໂຫຍດອັນເປັນຕາຍຂອງຕົນ. ຕະຫລອດຊົ່ວໄລຍະແຫ່ງການດຳລົງຄົງຕົວຂອງ ແສັບ ປະເທດສັງຄົມນິຍົມໄດ້ສົ່ງເອກະສານຄົບຊຸດທາງດ້ານວິທະຍາສາດ-ເຕັກນິກໃຫ້ກັນ ເປັນຈຳນວນຫລວງຫລາຍ.

ການຮ່ວມມືທາງດ້ານວິທະຍາສາດ-ເຕັກນິກ ພາໄປເຖິງບ່ອນທີ່ວ່າ ປະເທດສັງຄົມນິຍົມ ແຕ່ລະປະເທດບໍ່ຈຳເປັນທີ່ຈະຕ້ອງສົ້ນເປືອງເວລາ, ທຶນຮອນ ແລະ ເຫື່ອແຮງ ເຂົ້າໃນການຄົ້ນຄວ້າ ບັນຫາທາງດ້ານວິທະຍາສາດ ເຕັກ-ນິກ ຊຶ່ງໄດ້ມີການແກ້ໄຂຕົກໄປແລ້ວ ຢູ່ໃນປະເທດອ້າຍນ້ອງປະເທດອື່ນໆ.

ອີກເບື້ອງຫນຶ່ງຂອງການຮ່ວມມືທາງດ້ານວິທະຍາສາດ-ເຕັກນິກລະຫວ່າງ ປະເທດສັງຄົມນິຍົມ ກໍ່ແມ່ນການຮ່ວມມືກັນ ໃນການກໍ່ສ້າງພະນັກງານ. ຊາວ ຫນຸ່ມເປັນຈຳນວນຫລວງຫລາຍ ຈາກປະເທດອ້າຍນ້ອງ ລ້ວນແຕ່ພາກັນສຶກສາ ຮ່ຳຮຽນຢ່າງເປັນລະບົບຢູ່ໃນໂຮງຮຽນຊັ້ນສູງ ຂອງປະເທດສະມາຊິກ ແສັບ. ຮູບການຫນຶ່ງຂອງການຮ່ວມມືໃນດ້ານນີ້ ກໍ່ແມ່ນບັນຫາ ການສົ່ງພະນັກງານ ວິຊາການ ແລະ ກຳມະກອນໄປຮຽນໃນພາກການຜະລິດຕົວຈິງ ຢູ່ຕາມວິສາ ຫະກິດ ຂອງປະເທດສັງຄົມນິຍົມ ປະເທດອື່ນໆ ກໍ່ຄື ເລື່ອງ ການສົ່ງ ນັກວິ ທະຍາສາດ ແລະ ນັກວິຊາການໄປປະຕິບັດງານຢູ່ສະຖາບັນຄົ້ນຄວ້າວິທະຍາ-ສາດ ແລະ ໂຮງຮຽນຊັ້ນສູງຂອງປະເທດອ້າຍນ້ອງ ເພື່ອຍົກລະດັບຄວາມຊຳ ນິຊຳນານຂຶ້ນ.

ການຄ້າຕ່າງປະເທດ ຮູບການຮ່ວມມືທາງດ້ານເສດຖະກິດ ລະຫວ່າງປະ ເທດສັງຄົມນິຍົມອັນຫນຶ່ງທີ່ສຳຄັນ ກໍ່ແມ່ນ ການຄ້າ ຕ່າງປະເທດ. ການປະກອບສ້າງລະບົບເສດຖະກິດສັງຄົມນິຍົມແຫ່ງໂລກໄດ້ພາ ໄປເຖິງ ບ່ອນເກີດມີຕະຫລາດສາກົນ ສັງຄົມນິຍົມ. ຈຸດພິເສດຂອງຕະຫລາດ

ດ້ວ ກ່າວ ຢູ່ບ ນວ່າ ມັນ ບ ມີ ລັກສະນະ ອະນາທິປະໄຕ ແລະ ບ ມີ ການ ຕໍ່ ສູ້ ແຍ່ງ ຊິ ງ ກັນ, ບ ມີ ສະພາບ ລາ ຄາ ຂ ນ ໆ ລ ວ ໆ ແບບ ຕາ ມ ມີ ຕາ ມ ເກີ ດ ແລະ ບ ມີ ການ-ແລກ ປ ຽ ນ ນ ໍາ ກັ ນ ແບບ ບ ່ ເທ ່ າ ທ ຽ ມ ກັ ນ ບ ມີ ເສ ີ ກ ການ ຄ ້ າ, ບ ມີ ການ ຄ ້ າ ຈ ໍ າ ກັ ດ ແບບ ເອ ົ າ ປ ຽ ບ ກັ ນ, ບ ມີ ປ ະ ເທ ດ ໜ ຶ ່ ງ ຊ ູ ດ ຣ ີ ດ ແລະ ປ ຸ ້ ນ ສ ະ ດ ົ ມ ອ ີ ກ ປ ະ ເທ ດ ໜ ຶ ່ ງ.

ການ ຄ ້ າ ຕ ່ າ ງ ປ ະ ເທ ດ ລ ະ ຫ ວ ່ າ ງ ປ ະ ເທ ດ ສ ັ ງ ຄ ົ ມ ນ ິ ຍ ົ ມ ແ ມ ່ ນ ຂ ະ ຫ ຍ າ ຍ ຕ ົ ວ ໄ ປ ຕ າ ມ ແ ຜ ນ ກ ານ ທ ີ ່ ໄ ດ ້ ມ ີ ກ ານ ຄ ົ ້ ນ ຄ ວ ້ າ ວ ່ າ ງ ອ ອ ກ ມ າ ລ ວ ງ ໜ ້ າ ແ ລ ້ ວ ບ ມ ີ ພ ົ ້ ນ ຖ ານ ເ ງ ື ່ ອ ນ ໄ ຂ ທ ີ ່ ຕ ່ າ ງ ຝ ່ າ ຍ ຕ ່ າ ງ ໄ ດ ້ ຮ ັ ບ ຜ ົ ນ ປ ະ ໂ ຫ ຍ ດ ຊ ່ ວ ຍ ສ ອ ດ ຄ ລ ອ ງ ກ ັ ບ ສ ິ ດ ຜ ົ ນ ປ ະ - ໂ ຫ ຍ ດ ໃ ນ ການ ຂ ະ ຫ ຍ າ ຍ ເ ສ ດ ຖ ະ ກ ິ ດ ໃ ນ ແ ຕ ່ ລ ະ ປ ະ ເ ທ ດ. ການ ຄ ້ າ ແ ມ ່ ນ ດ ໍ າ ເ ນ ີ ນ ໄ ປ ໃ ນ ລ າ ຄ າ ຄ ົ ງ ທ ີ ່ ແ ລ ະ ເ ປ ັ ນ ທ ໍ າ ລ າ ຄ າ ທ ີ ່ ໄ ດ ້ ມ ີ ການ ວ າ ງ ລ ົ ງ ດ ້ ວ ຍ ສ ັ ນ ຍ າ ແ ບ ບ ສ ະ ໝ ັ ກ ໃ ຈ ທ ີ ່ ຊ ຸ ້ ນ ກ ັ ນ ສ ໍ າ ລ ັ ບ ໄ ລ ຍ ະ ເ ວ ລ າ ໃ ດ ໜ ຶ ່ ງ (ທ ໍ າ ມ ະ ດ າ ກ ໍ ່ ແ ມ ່ ນ ສ ໍ າ ລ ັ ບ ໄ ລ ຍ ະ ຫ ້ າ ປ ີ) ໂ ດ ຍ ມ ີ ການ ຄ ໍ ານ ຶ ງ ເ ຖ ິ ງ ລ າ ຄ າ ຕ ະ ຫ ລ າ ດ ໂ ລ ກ. ລ ັ ກ ສ ະ ນ ະ ສ ະ ເ ພ າ ະ ຂ ອ ງ ການ ຄ ້ າ ຕ ່ າ ງ ປ ະ ເ ທ ດ ລ ະ ຫ ວ ່ າ ງ ປ ະ ເ ທ ດ ສ ັ ງ ຄ ົ ມ ນ ິ ຍ ົ ມ ຊ ຸ ່ ງ ດ ໍ າ ເ ນ ີ ນ ໄ ປ ຢ ູ ່ ໃ ນ ຕ ະ ຫ ລ າ ດ ສ າ ກ ົ ນ ສ ັ ງ ຄ ົ ມ ນ ິ ຍ ົ ມ ແ ມ ່ ນ ລ ັ ກ ສ ະ ນ ະ ຮ ່ ວ ມ ໄ ມ ້ ຮ ່ ວ ມ ມ ື ແ ລ ະ ຊ ່ ວ ຍ ເ ຫ ລ ື ອ ຊ ຸ ່ ງ ກ ັ ນ ແ ລ ະ ກ ັ ນ.

ຕ ະ ຫ ລ າ ດ ສ າ ກ ົ ນ ສ ັ ງ ຄ ົ ມ ນ ິ ຍ ົ ມ ບ ມ ີ ຄ ວ າ ມ ຫ ຍ ຸ ້ ງ ຍ າ ກ ກ ່ ຽ ວ ກ ັ ບ ການ ຈ ໍ າ ໜ ່ າ ຍ ອ ອ ກ. ໃ ນ ຂ ະ ນ ະ ທ ີ ່ ການ ຜ ະ ລ ິ ດ ມ ີ ການ ເ ຕ ີ ບ ໃ ຫ ຍ ່ ຂ ະ ຫ ຍ າ ຍ ຕ ົ ວ ຢ ່ າ ງ ເ ມ ື ອ ງ-ມ ິ ດ ລ ຽ ນ ຕ ິ ດ ແ ລ ະ ລ ະ ດ ັ ບ ຊ ີ ວ ິ ດ ການ ເ ປ ັ ນ ຢ ູ ່ ທ າ ງ ດ ້ ານ ວ ັ ດ ຖ ຸ ແ ລ ະ ວ ັ ດ ທ ະ ນ ະ-ທ ໍ າ ຂ ອ ງ ຊ າ ວ ຜ ູ ້ ອ ອ ກ ແ ຮ ງ ງ ານ ຢ ູ ່ ໃ ນ ໝ ົ ດ ທ ຸ ກ ໆ ປ ະ ເ ທ ດ ສ ັ ງ ຄ ົ ມ ນ ິ ຍ ົ ມ ໄ ດ ້ ຖ ິ ກ ແ ກ ້ ໄ ຂ ໃ ຫ ້ ສ ູ ງ ຂ ຶ ້ ນ ຕ ື ່ ມ ນ ັ ້ ນ ບ ໍ ລ ິ ມ າ ດ ຂ ອ ງ ຕ ະ ຫ ລ າ ດ ສ າ ກ ົ ນ ສ ັ ງ ຄ ົ ມ ນ ິ ຍ ົ ມ ກ ໍ ມ ີ ການ ເ ຕ ີ ບ ໃ ຫ ຍ ່ ຂ ະ ຫ ຍ າ ຍ ຕ ົ ວ ຂ ຶ ້ ນ ຢ ່ າ ງ ເ ມ ື ອ ງ ມ ິ ດ ລ ຽ ນ ຕ ິ ດ. "ພ ວ ກ ເ ຮ ົ າ ໝ ົ ດ ທ ຸ ກ ຄ ົ ນ ມ ີ ຄ ວ າ ມ ສ ົ ນ ໃ ຈ ຢ າ ກ ໃ ຫ ້ ຕ ະ ຫ ລ າ ດ ສ ັ ງ ຄ ົ ມ ນ ິ ຍ ົ ມ ມ ີ ຄ ວ າ ມ ສ າ ມ າ ດ ຕ ອ ບ ສ ະ ໜ ອ ງ - ຄ ວ າ ມ ຮ ຽ ກ ຮ ້ ອ ງ ຕ ້ ອ ງ ການ ອ ັ ນ ນ ັ ບ ມ ື ້ ທ ະ ວ ີ ຄ ູ ນ ຂ ຶ ້ ນ ຂ ອ ງ ຂ ົ ນ ຊ ັ ້ ນ ປ ະ ເ ທ ດ ຢ ູ ່ ໃ ນ ວ ິ ໄ ສ ຄ ະ ນ າ ຍ າ ດ ຂ ອ ງ ພ ວ ກ ເ ຮ ົ າ. ແ ນ ່ ນ ອ ນ, ພ ົ ້ ນ ໄ ດ ້ ຈ າ ກ ການ ປ ະ ສ ົ ມ ປ ະ ສ ານ ຄ ວ າ ມ ອ າ ດ ສ າ ມ າ ດ ທ າ ງ ດ ້ ານ ເ ສ ດ ຖ ະ ກ ິ ດ ຊ ຸ ່ ງ ກ ັ ນ ແ ລ ະ ກ ັ ນ ກ ໍ ບ ໍ ່ ແ ນ ່ ນ ຈ ະ ໄ ປ ວ ັ ດ ແ ທ ກ ເ ອ ົ າ ແ ຕ ່ ຍ ອ ມ ພ ົ ້ ນ ໄ ດ ້ ທ າ ງ ດ ້ ານ ການ ຄ ້ າ ເ ທ ົ ່ າ ນ ັ ້ ນ ". ๑)

ປ ະ ເ ທ ດ ສ ັ ງ ຄ ົ ມ ນ ິ ຍ ົ ມ ມ ີ ການ ພ ົ ວ ພ ັ ນ ການ ຄ ້ າ ກ ັ ນ ແ ລ ະ ກ ັ ນ ບ ົ ນ ພ ົ ້ ນ ຖ ານ ສ ັ ນ ຍ າ ກ ່ ຽ ວ

---

๑) ເ ອ ກ ະ ສ ານ ກ ອ ງ ປ ະ ຊ ຸ ມ ໃ ຫ ຍ ່ ຄ ັ ້ ງ ທ ີ ๘ ພ ໍ ສ ໍ ຊ ໍ ຊ ໍ ຍ ໍ ຊ ໍ ຍ ໍ ຊ ໍ ຍ

ກັບການຈັດສົ່ງສິນຄ້າໃຫ້ກັນ ໃນໄລຍະຍາວນານ ໂດຍມີການກຳນົດ ຈຳນວນ ແລະລາຄາສິນຄ້າ ແລະວິທີການປະຕິບັດການໄລ່ລຽງນຳກັນ.

ການຄ້າຕ່າງປະເທດລະຫວ່າງປະເທດສັງຄົມນິຍົມ ເປັນພາຫະນະອັນສຳຄັນເພື່ອເສີມຂະຫຍາຍເສດຖະກິດ ແລະ ວັດທະນະທຳຂອງປະເທດດັ່ງກ່າວ. ມັນເປັນເງື່ອນໄຂເພື່ອເຮັດໃຫ້ລະດັບຊີວິດການເປັນຢູ່ຂອງມວນຊົນສູງຂຶ້ນຢ່າງເປັນລະບົບ ແລະ ເພື່ອຮັບປະກັນໃຫ້ຄົນມີວຽກເຮັດງານທຳຢ່າງເຕັມສ່ວນ.

ການວາງຫລັກການ ການຜູກຂາດການຄ້າຕ່າງປະເທດ ຢູ່ໃນປະເທດສັງຄົມນິຍົມທັງຫມົດ ບໍ່ສະເພາະພຽງແຕ່ ເພື່ອເປັນການປ້ອງກັນ ເສດຖະກິດ - ແຫ່ງຊາດ ຢູ່ໃນປະເທດດັ່ງກ່າວ ໃຫ້ມົ້ນຈາກການຮຸກຮານທາງດ້ານເສດຖະ-ກິດ ຂອງພວກຈັກກະພັດເທົ່ານັ້ນ ແຕ່ມັນຍັງເປັນການປະກອບສ່ວນຊຸກຍູ້ ການເສີມຂະຫຍາຍ ແລະ ການປັບປຸງການພົວພັນເສດຖະກິດ ລະຫວ່າງປະເທດສັງຄົມນິຍົມນຳກັນ.

ການເພີ່ມທະວີລະດັບເສດຖະກິດ ຂອງປະເທດສັງຄົມນິຍົມຂຶ້ນຢ່າງເນື້ອງນິດລຽນຕິດ ໄດ້ເຮັດໃຫ້ໂຄງປະກອບສິນຄ້າຂາອອກ ແລະ ຂ້າເຂົ້າຂອງ ປະເທດດັ່ງກ່າວມີການປ່ຽນແປງ. ຖ້າຫາກວ່າໃນໄລຍະກ່ອນສົງຄາມ ຫມົດ ທຸກປະເທດສັງຄົມນິຍົມ ນອກຈາກເຊັກໂກສະໂລວາກີ ແລະ ສ.ປ.ຢ ສ່ວນຫຼາຍ ລ້ວນແຕ່ເປັນປະເທດທີ່ສົ່ງສະບຽງອາຫານ ແລະ ວັດຖຸດິບອອກໄປຂາຍແຕ່ມາດຽວນີ້ ສະພາບໄດ້ມີການປ່ຽນແປງແລ້ວ. ຍົກຕົວຢ່າງ ກ່ອນສົງຄາມ ບູນກາລີ ເປັນປະເທດຫນຶ່ງ ທີ່ສົ່ງຜະລິດຕະພັນກະເສດອອກໄປຂາຍເປັນຈຸດຫນັກແຕ່ນັບແຕ່ປີ ຈຈກຸ0 ມາ ພາກສ່ວນໃຫຍ່ຂອງສິນຄ້າຂາອອກຂອງບູນກາລີ ລ້ວນແຕ່ແມ່ນຜະລິດຕະພັນອຸດສາຫະກຳ.

ການຮ່ວມມືທາງດ້ານ ການຂະຫຍາຍຕົວຢ່າງມີໄຊຂອງເສດຖະກິດ, ການ
ການເງິນ- ເງິນຕາ ລົງເລິກໃນການຮ່ວມມືເສດຖະກິດ ພາຍໃຕ້ ຮູບການຕ່າງໆ ລະຫວ່າງປະເທດສັງຄົມນິຍົມກໍ່ຄືການ

ແລກປ່ຽນທາງດ້ານການຄ້າ ລະຫວ່າງປະເທດດັ່ງກ່າວ ລ້ວນແຕ່ດຳເນີນ ໄປ ໂດຍຜ່ານການພົວພັນທາງດ້ານການເງິນ-ເງິນຕາ.

ສັນຍາກ່ຽວກັບສິນເຊື່ອ ມີບົດບາດອັນສຳຄັນ ໃນການປັບປຸງການຮ່ວມ ມື

ເສດຖະກິດ ລະຫວ່າງປະເທດສັງຄົມນິຍົມ. ປະເທດສັງຄົມນິຍົມ ໄດ້ສ້າງຕັ້ງ ລະບົບສິນເຊື່ອສາກົນຂອງຕົນຄື ລະບົບສິນເຊື່ອສາກົນແບບສັງຄົມນິຍົມ. ສິນ ເຊື່ອສາກົນຂອງບັນດາປະເທດ ໃນວົງສາຄະນາຍາດສັງຄົມນິຍົມແມ່ນແນ ໃສ່ ເຮັດໃຫ້ເສດຖະກິດ ຂະຫຍາຍຕົວຢ່າງເລັ່ງລັດ ແລະ ເຮັດໃຫ້ຊີວິດການເປັນ ຢູ່ທາງດ້ານວັດຖຸ ແລະ ວັດທະນະທຳ ຂອງປະຊາຊົນ ໃນປະເທດສັງຄົມນິຍົມ ເພີ່ມຂຶ້ນຢ່າງບໍ່ຢຸດຢັ້ງ. ໃນນີ້ສິນເຊື່ອແມ່ນສະຫນອງໃຫ້ກັນ ພາຍໃຕ້ເງື່ອນໄຂ ແບບຜ່ອນຜັນທີ່ສຸດ. ຖ້າຫາກວ່າ ພວກປະເທດທຶນນິຍົມ ເກັບດອກເບ້ຍ ສິນ ເຊື່ອໃນອັດຕາສູງທີ່ສຸດ (ຈາກ ມ,๕% ຮອດ ຜ% ໃນປີຫນຶ່ງ), ມີການຜູກ ມັດການສະຫນອງສິນເຊື່ອດ້ວຍການວາງເງື່ອນໄຂຈຳນວນຫນຶ່ງທາງດ້ານເສດ ຖະກິດ ແລະ ການເມືອງ ແຕ່ຢູ່ໃນປະເທດ ໃນວົງສາຄະນາຍາດສັງຄົມນິຍົມ ຕາມທຳມະດາແລ້ວ ດອກເບ້ຍສິນເຊື່ອ ແມ່ນວາງກັນໃນອັດຕາ ๑-๘% ຕໍ່ປີ. ຢູ່ໃນບາງກໍລະນີສະເພາະ ກໍ່ມີການສະຫນອງສິນເຊື່ອ ໂດຍບໍ່ມີການຄິດໄລ່ຄ່າ ດອກເບ້ຍເລີຍ. ຢູ່ໃນສັນຍາວ່າດ້ວຍສິນເຊື່ອ ບໍ່ເຄີຍມີການວາງ ເງື່ອນໄຂ ແບບບໍ່ສະເຫມີພາບທາງດ້ານການເມືອງ ຫລື້ດ້ານເສດຖະກິດ ກຽວກັບ ການ ນຳໃຊ້ສິນເຊື່ອຈັກເທື່ອ. ຕາມທຳມະດາແລ້ວການທົດແທນຄ່າສິນເຊື່ອແມ່ນດຳ ເນີນໄປດ້ວຍການຈັດສົ່ງສິນຄ້າພື້ນເມືອງຂອງປະເທດກ່ຽວຂ້ອງ.

ໃນປີ ๑ຜຜ๔ ຢູ່ໃນຂອບເຂດຂອງ ແສັບ ໄດ້ມີການສ້າງຕັ້ງ <u>ທະນາຄານ ສາກົນ</u> <u>ແຫ່ງການຮ່ວມມືທາງດ້ານເສດຖະກິດ</u>. ທະນາຄານດັ່ງກ່າວ ແມ່ນປະ ຕິບັດການໄລ່ລຽງຫລາຍຝ່າຍ ເປັນເງິນຕາພິເສດ- ຄືເປັນເງິນຮຸບ ກົງກາງ. ສິ່ງດັ່ງກ່າວ ໄດ້ເຮັດໃຫ້ການໄລ່ລຽງຫລາຍຝ່າຍ ລະຫວ່າງປະເທດສັງຄົມ ນິ ຍົມນຳກັນເບົາບາງ ແລະ ງ່າຍດາຍກວ່າເກົ່າ, ມັນໄດ້ສ້າງຂໍ້ສະດວກ ເພື່ອ ສືບຕໍ່ເສີມຂະຫຍາຍການຄ້ານຳກັນ ແລະ ເພື່ອເພີ່ມທະວີປະສິດທິຜົນຂອງການ ຄ້າຂຶ້ນ. ການສ້າງຕັ້ງ<u>ທະນາຄານການລົງທຶນສາກົນ</u> ທີ່ມີທຶນພື້ນຖານ ປະກອບ ດ້ວຍເງິນອັດຕາຮຸ້ນສ່ວນ ຂອງສະມາຊິກທະນາຄານ ເປັນເງິນຕາເສລີ ແລະ ເປັນເງິນຮຸບ ກົງກາງ ໃນປີ ๑ຜກຕ ໄດ້ເປັນຂໍ້ສະດວກເພື່ອດຳເນີນ ນະໂຍ ບາຍແບບກົມກຽວກັນ ທາງດ້ານການລົງທຶນ, ເພື່ອຊຸກຍູ້ການກໍ່ສ້າງກິດຈະ - ການຂະຫນາດໃຫຍ່ ຊຶ່ງເປັນທີ່ສົນໃຈນຳກັນ ດ້ວຍຈັງຫວະອັນເລັ່ງລັດ ແລະ ເພື່ອກໍ່ສ້າງກິດຈະການປະສົມ.

ການປັບປຸງການພົວພັນລະຫວ່າງປະເທດສັງຄົມນິຍົມ ທາງດ້ານການເງິນ ເງິນຕາ ດຳເນີນໄປຢ່າງເປັນປົກລຽນຕົດ ແລະ ຢ່າງເປັນປະຈຳ, ໃນການພົວພັນເສດຖະກິດ ອັນນັບມື້ນັບຂະຫຍາຍຕົວກ້ວາງອອກ ລະຫວ່າງປະເທດ - ສະມາຊິກ ແລັບ ບົດບາດຂອງເງິນກົງກາງ ໃນຖານະເປັນເງິນຕາລວມ ນັ້ນ ໄດ້ເພີ່ມຂຶ້ນ.

ສົນເຊື່ອສາກົນຂອງປະເທດສັງຄົມນິຍົມ ເປັນເງື່ອນໄຂຊ່ວຍໃຫ້ປະເທດທີ່ ບໍ່ຂະຫຍາຍຕົວປານໃດ ທາງດ້ານເສດຖະກິດ ສາມາດເລັ່ງລັດຈັງຫວະ ໃນ ການຂະຫຍາຍຕົວຂອງຕົນ, ສາມາດກໍ່ສ້າງພື້ນຖານອັນໜັກແໜ້ນ ເພື່ອ ຫັນ ປ່ຽນເສດຖະກິດແຫ່ງຊາດ ໄປເປັນອຸດສາຫະກຳ ແລະ ຄ່ອຍໆນຳເອົາລະດັບ ການຂະຫຍາຍຕົວທາງດ້ານເສດຖະກິດຂອງຕົນໄປທັນກັບ ປະເທດສັງຄົມນິຍົມ ອື່ນໆ ທີ່ຂະຫຍາຍຕົວທາງດ້ານເສດຖະກິດ.

ສົນເຊື່ອສາກົນສັງຄົມນິຍົມ ຊຸກຍູ້ໃຫ້ມີການນຳໃຊ້ການລົງທຶນເຂົ້າໃນເສດ ຖະກິດແຫ່ງຊາດ ຢ່າງມີປະສິດທິຜົນ, ໃຫ້ມີການສ້າງໂຄງປະກອບການແບ່ງ-ງານສາກົນສັງຄົມນິຍົມ ຢ່າງຖືກຕ້ອງເໝາະສົມ, ນອກນັ້ນຍັງເປັນຂໍ້ສະດວກ ເພື່ອເປີດກ້ວາງການພົວພັນ ການຄ້າຕ່າງປະເທດຢ່າງເປັນປະຈຳ ລະຫວ່າງ ປະເທດສັງຄົມນິຍົມ ບົນພື້ນຖານຕ່າງຝ່າຍ ຕ່າງໄດ້ຮັບຜົນປະໂຫຍດ. ການ ຂະຫຍາຍຕົວຂອງການພົວພັນສົນເຊື່ອ ລະຫວ່າງປະເທດ ໃນລະບົບສັງຄົມນິ ຍົມແຫ່ງໂລກ ເປັນການສ່ອງແສງເຖິງທາດແທ້ ຂອງການພົວພັນເສດຖະກິດ ແບບສັງຄົມນິຍົມ .

ການສົມຮ່ວມເສດຖະກິດ ແບບສັງຄົມນິຍົມ

<u>ການສົມຮ່ວມເສດຖະກິດແບບສັງຄົມນິຍົມ</u>ແມ່ນ ການເຕົ້າໂຮມ ແລະ ການປະສານສົມທົບກຳ ລັງແຮງຂອງປະເທດສັງຄົມນິຍົມນຳກັນ ຢ່າງ ມີແຜນການ ເພື່ອຈຸດປະສົງແກ້ໄຂ ບັນຫາອັນສຳຄັນຍິ່ງ ທາງດ້ານສັງຄົມ - ເສດຖະກິດ ທີ່ແນໃສ່ສືບຕໍ່ເພີ່ມທະວີກຳລັງການຜະລິດ, ບັນລຸເຖິງລະດັບ ສູງ ສຸດທາງດ້ານວິທະຍາສາດ-ເຕັກນິກ, ເພື່ອເພີ່ມທະວີຄວາມຜູກພັນດີ ຂອງປະ ຊາຊົນ, ປັບປຸງກຳລັງປ້ອງກັນຊາດ ບໍ່ວ່າຂອງແຕ່ລະປະເທດກໍ່ຄືຂອງ ທັງ ໝົດວົງສາຄະນາຍາດສັງຄົມນິຍົມ.

ຄວາມຈຳເປັນທີ່ຈະຕ້ອງສ້ອຍໃຊ້ທ່າດີເລີດຂອງສັງຄົມນິຍົມ ໄດ້ຊຸກຍູ້ໃຫ້ມີ ການຊອກຫາຮູບການສົມຮ່ວມ ເສດຖະກິດແບບສັງຄົມນິຍົມ ຮູບການອັນໃຫມ່. ຕະຫລອດໄລຍະແຫ່ງການກໍ່ສ້າງສັງຄົມນິຍົມ ປະເທດສັງຄົມນິຍົມໄດ້ສະສົມບົດ ຮຽນ ອັນດີໝົດຫລາຍຮູບຫລາຍສີ ກ່ຽວກັບການຈັດຕັ້ງການຜະລິດ, ການ ຊຸ້ມ ຄອງ ແລະ ການແກ້ໄຂບັນຫາເສດຖະກິດ.

ໂດຍສອດຄ່ອງກັບມະຕິຕົກລົງຂອງກອງປະຊຸມສະໄຫມທີ ๘๗ ແລະທີ ๘๘ ຂອງສະພາຊ່ວຍເຫລືອຊຶ່ງກັນແລະກັນ ທາງດ້ານເສດຖະກິດ ຢູ່ທີ່ກອງປະຊຸມ ສະໄຫມທີ ๘๕ ຂອງ ແສັບ ໃນເດືອນກໍລະກົດ ປີ ๑๙๗๑ ໄດ້ມີການຂົ້ນຄ້ວາ ແລະ ຮັບຮອງເອົາໂຄງການຄົບຊຸດ ກ່ຽວກັບການສົ່ງເສີມ ແລະ ປັບປຸງ ການຮ່ວມມື ແລະ ການເສີມຂະຫຍາຍການສົມຮ່ວມເສດຖະກິດ ແບບສັງຄົມນິ ຍົມ ລະຫວ່າງປະເທດ-ສະມາຊິກ ແສັບ. ໂຄງການດັ່ງກ່າວນີ້ໄດ້ກຳນົດ ໃຫ້ ມີການປະຕິບັດເປັນແຕ່ລະໄລຍະໄປ ໃນກຳນົດເວລາ ๑๕-๘๐ ປີ. ຄືດັ່ງໄດ້ ເນັ້ນຢ້ຳໄວ້ຢູ່ໃນໂຄງການຄົບຊຸດ ການເສີມຂະຫຍາຍການສົມຮ່ວມເສດຖະກິດ ແບບສັງຄົມນິຍົມ ລະຫວ່າງປະເທດສະມາຊິກ ແສັບ ແມ່ນການວ້ວັດແຫ່ງການ ແບ່ງງານສາກົນສັງຄົມນິຍົມ ທີ່ແມ່ນພັກກອມມູນິດ ແລະ ພັກກຳມະກອນ ແລະ ລັດຖະບານປະເທດສະມາຊິກ ແສັບ ເປັນຜູ້ບ່ຽງຄັບບັນຊາ ຢ່າງມີສະຕິສຳນຶກ ແລະຢ່າງມີແຜນການ, ມັນແມ່ນການຫຍັບເຂົ້າໃກ້ກັນຂອງເສດຖະກິດ ໃນປະ ເທດສະມາຊິກ ແລະ ແມ່ນການສ້າງຕັ້ງໂຄງປະກອບເສດຖະກິດ ແຫ່ງຊາດ ຂອງປະເທດດັ່ງກ່າວ ໃຫ້ທັນສະໄຫມ ແລະ ໃຫ້ມີປະສິດທິຜົນສູງ, ມັນ ແມ່ນ ການຄ່ອຍໆຫຍັບເຂົ້າຫາກັນ ແລະ ຄ່ອຍໆ ເຫົ້າຫຽມກັນ ລະຫວ່າງ ລະດັບ ການຂະຫຍາຍຕົວທາງດ້ານເສດຖະກິດ ຂອງປະເທດດັ່ງກ່າວ, ແມ່ນການ ສ້າງຕັ້ງສາຍພົວພັນອັນເລິກເຊິ່ງ ແລະ ຫມັ້ນຫ່ຽງ ຢູ່ໃນຂະແໜງການ ພື້ນ ຖານ ຂອງເສດຖະກິດ, ວິທະຍາສາດ, ເຕັກນິກ , ແມ່ນການວ້ວັດ ແຫ່ງ ການ ເປີດກ້ວ້າງ ແລະ ປັບປຸງຕະຫລາດສາກົນ ຂອງປະເທດດັ່ງກ່າວ ແລະ ແຫ່ງການປັບປຸງການພົວພັນ ໂດຍຜ່ານສົນຄ້າເງິນ.

ໂຄງການຄົບຊຸດກ່ຽວກັບການສົ່ງເສີມ ແລະ ປັບປຸງການຮ່ວມມືແລະ ການເສີມຂະຫຍາຍການສົມຮ່ວມເສດຖະກິດ ແບບສັງຄົມນິຍົມ ແມ່ນຕັ້ງຢູ່ ບົນ ພື້ນຖານຫລັກການສາກົນສັງຄົມນິຍົມ, ສະເໝີພາບຢ່າງເຕັມສ່ວນ,ຕ່າງຝ່າຍ

ຕ່າງມີພົ້ນປະໂຫຍດ ແລະ ຊ່ວຍເຫລືອຊຶ່ງກັນແລະກັນ ຖ້ານິດສະຫາຍ.

ປະເທດສະມາຊິກ ແສັບ ພາກັນສືບຕໍ່ເສີມຂະຫຍາຍສາຍສຳພັນທາງດ້ານ ເສດຖະກິດ ກັບປະເທດສັງຄົມນິຍົມອື່ນໆ ກໍຄືກັບປະເທດທີ່ນິຍົມຂະຫຍາຍຕົວ ແລະ ປະເທດພວມພັດທະນາ. ປະເທດສະມາຊິກ ແສັບ ຕໍ່ສູ້ຢ່າງຕັ້ງໜ້າເພື່ອ ໃຫ້ມີການລົບລ້າງຢ່າງສິ້ນເຊີງການເອົາປຽບກັນ ໃນດ້ານການຄ້າສາກົນແລະ ດ້ານການພົວພັນເສດຖະກິດ, ເພື່ອປະຕິບັດລະບອບການຄ້າລະຫວ່າງປະເທດ ໃຫ້ມີລັກສະນະນະໂຍບາຍຕໍ່ກັນ ຢ່າງສະເໝີຕົ້ນສະເໝີປາຍ.

ການສົມຮ່ວມເສດຖະກິດແບບສັງຄົມນິຍົມ ແມ່ນການວັດ ທີ່ມີລັກສະນະ ກົດເກນ ແລະ ເກີດຂຶ້ນຢ່າງພາວະວິໄສ ຈາກລະດັບຂະຫຍາຍຕົວ ອັນສູງສົ່ງ ຂອງກຳລັງການຜະລິດ ຢູ່ໃນປະເທດສະມາຊິກ ແສັບ. ການຕ້ຳໂຮມເຫງົ້າ ພະລັງທາງດ້ານເສດຖະກິດຂອງປະເທດເຫລົ່ານີ້, ການສົມທົບກັນຢ່າງ ສະ ໜິດແໜ້ນ ແລະ ການຂະຫຍາຍຕົວ ຢ່າງມີການປະສົມປະສານກັນແລະຢ່າງ ມີແຜນການ ຂອງເສດຖະກິດແຫ່ງຊາດ ໃນປະເທດເຫລົ່ານີ້ ເປັນເງື່ອນໄຂ ຊ່ວຍໃຫ້ສາມາດຮັບປະກັນ ການຂະຫຍາຍຕົວຂອງເສດຖະກິດ ໃນແຕ ລະປະ ເທດໄດ້ດີກວ່າເກົ່າ ແລະ ຢ່າງເຕັມສ່ວນກວ່າເກົ່າ ແລະ ໃນເວລາດຽວກັນ ນັ້ນ ມັນກໍຊ່ວຍໃຫ້ສາມາດໝູນໃຊ້ກົດເກນເສດຖະກິດ ແລະ ທ່າດີເລີດ ຂອງ ສັງຄົມນິຍົມ ຢູ່ໃນຂອບເຂດທົ່ວໂລກໄດ້ຢ່າງເຕັມສ່ວນກວ່າເກົ່າ.

ຜົນສຳເລັດຂອງການຮ່ວມມືເສດຖະກິດ ແລະ ຄວາມມັ່ງຄັ່ງເຂັ້ມແຂງອັນ ນັບມື້ທະວີຂຶ້ນ ຂອງວົງສາຄະນາຍາດແຫ່ງໂລກ ຂອງປະເທດສັງຄົມນິຍົມ-ແມ່ນປັດໄຈທີ່ຮັບປະກັນໄຊຊະນະຂອງສັງຄົມນິຍົມ ໃນການແຂ່ງຂັນກັນ ທາງ ດ້ານເສດຖະກິດ ກັບທຶນນິຍົມ.

๔. ການຢູ່ຮ່ວມກັນຢ່າງສັນຕິ ແລະ ການແຂ່ງຂັນກັນທາງ ດ້ານເສດຖະກິດລະຫວ່າງສອງລະບົບແຫ່ງໂລກ

ການຢູ່ຮ່ວມກັນຢ່າງສັນຕິແມ່ນຫຍັງ ? ແມ່ນ ວ.ອິ.ເລນິນ ທີ່ເປັນຜູ້ ວາງ ພື້ນຖານທາງດ້ານທິດສະດີ ທີ່ຢັ້ງຢືນ ຍັນຫາກ່ຽວກັບການຢູ່ຮ່ວມກັນຢ່າງສັນຕິ ແລະ ການແຂ່ງຂັນກັນທາງດ້ານເສດ

ຖະກົດ ລະຫວ່າງ ສັງຄົມນິຍົມ ກັບ ທຶນນິຍົມ. ເພີ່ນໄດ້ອີງໃສ່ຫລັກມູນທີ່ ວ່າ ການປະຕິວັດສັງຄົມນິຍົມ ບໍ່ອາດຈະໄດ້ຮັບໄຊຊະນະໄດ້ ຢູ່ໃນຫມົດທຸກໆ ປະ ເທດ ໃນເວລາດຽວກັນ. ຍ້ອນແນວນີ້ ໃນຊົ່ວໄລຍະເວລາໃດຫນຶ່ງ ປະເທດ ສັງຄົມນິຍົມ ປະເທດຫນຶ່ງປະເທດດຽວ ຫລື ຫມວດຫນຶ່ງ ກໍ່ຈະມີ ການຂະ-ຫຍາຍຕົວໄປໃນເວລາທີ່ຍັງຄົງຮັກສາລະບຽບການຂອງທຶນນິຍົມ ໄວ້ຢູ່ໃນ ປະ ເທດຈຳນວນຫນຶ່ງ.

ການມີສອງລະບົບສັງຄົມ ຄື ລະບອບສັງຄົມນິຍົມ ແລະ ລະບອບທຶນນິຍົມ ເຮັດໃຫ້ບໍ່ສາມາດຫລີກເວັ້ນ ການຢູ່ຮ່ວມກັນໂດຍສັນຕິ ລະຫວ່າງສອງລະບອບ. ການຢູ່ຮ່ວມກັນຢ່າງສັນຕິ ບໍ່ຫມາຍເຖິງ ການປະຕິເສດການຕໍ່ສູ້ຊົນຊັ້ນ. ການ ຢູ່ຮ່ວມກັນຂອງປະເທດທີ່ມີລະບອບສັງຄົມແຕກຕ່າງກັນ ແມ່ນຮູບການຫນຶ່ງແຫ່ງ ການຕໍ່ສູ້ຊົນຊັ້ນ ລະຫວ່າງສັງຄົມນິຍົມ ກັບ ທຶນນິຍົມ.

ການຢູ່ຮ່ວມກັນຢ່າງສັນຕິ ບໍ່ຫມາຍເຖິງການຖືກຕ້ອງລ່ອງລອຍນຳກັນ ຄືນ ລະຫວ່າງສອງແນວຄິດ- ສັງຄົມນິຍົມແລະທຶນນິຍົມ. ກົງກັນຂ້າມ ມັນຄາດຄະ ເນໃຫ້ ມີການເພີ່ມທະວີການຕໍ່ສູ້ ຂອງຊົນຊັ້ນກຳມະກອນ ແລະ ພັກຂອງ ຊົນ ຊັ້ນກຳມະກອນ, ຂອງຊາວຜູ້ອອກແຮງງານທັງຫມົດ ເພື່ອໄຊຊະນະຂອງແນວ ຄິດສັງຄົມນິຍົມ ແລະ ໄຊຊະນະຂອງແນວຄິດກອມມູນິດ.

ຄົນໂຊວຽດ ແລະ ຊາວຜູ້ອອກແຮງງານ ໃນປະເທດສັງຄົມນິຍົມອື່ນໆ ບໍ່ ມັກລະບຽບແບບແຜນຂອງທຶນນິຍົມ. ພວກກຸ່ມກຳອຳນາດຢູ່ໃນປະເທດນາຍທຶນ ກໍ່ບໍ່ມັກລະບຽບແບບແຜນ ຂອງສັງຄົມນິຍົມ ແຕ່ບັນຫາການສ້າງຕັ້ງລະບຽບ - ແບບແຜນ ແບບນັ້ນ ຫລື ແບບນີ້ ມັນພັດແມ່ນກົດຈະການພາຍໃນ ຂອງປະຊາ ຊົນປະເທດດັ່ງກ່າວ. ການພົວພັນຊຶ່ງກັນແລະກັນລະຫວ່າງສອງລະບອບສັງຄົມ ເສດຖະກິດ ທີ່ກົງກັນຂ້າມນີ້ ຈະຕ້ອງສ້າງຂຶ້ນບົນພື້ນຖານ ຫລັກການຢູ່ຮ່ວມກັນ ຢ່າງສັນຕິ.

ໃນຍຸກສະໄຫມປະຈຸບັນ ເມື່ອມັນມີອາວຸດທີ່ມີກຳລັງແຮງທຳລາຍຂະຫນາດ ໃຫຍ່ ເຊັ່ນ ລະເບີດປະລະມານູ, ສະເບີດໄຮໂດຣເຢັນ ແລະ ລະເບີດ ເນີ ຕຣົງ ແລະ ເມື່ອບໍ່ອາດຈະມີຜູ້ຊະນະໃນສົງຄາມໄດ້ດັ່ງນັ້ນ ມັນຈະຕ້ອງຕັດສົງ ຄາມອອກຈາກຊີວິດຂອງປະຊາຊາດ. ການຮັບຮູ້ແລະການປະຕິບັດ ຫລັກການ ຢູ່ຮ່ວມກັນຢ່າງສັນຕິ ໃຫ້ປະກົດຜົນເປັນຈິງຢ່າງບໍ່ຢຸດຢັ້ງ ແມ່ນເງື່ອນໄຂອັນສຳ

ຄັນຍົ່ງ ເພື່ອປົກປັກຮັກສາ ແລະ ປ້ອງກັນສັນຕິພາບ ແລະ ຄວາມປອດໄພ ຂອງປະຊາຊາດ.

ຢູ່ໃນໂຄງການດຳເນີນງານຂອງ ພ.ກ.ສ.ຊ ໄດ້ບົ່ງໄວ້ວ່າ: " ການ ຢູ່ຮ່ວມກັນຢ່າງສັນຕິ ລະຫວ່າງປະເທດສັງຄົມນິຍົມ ກັບ ປະເທດທຶນນິຍົມແມ່ນ ຄວາມຈຳເປັນອັນພາວະວິໄສ ແຫ່ງການຂະຫຍາຍຕົວຂອງສັງຄົມມະນຸດ. ສົງ ຄາມບໍ່ອາດ ແລະ ກໍ່ບໍ່ຄວນຈະໃຫ້ເປັນວິທີການເພື່ອແກ້ໄຂການຜິດຖຽງກັນ ຢູ່ ໃນສາກົນ. ການຢູ່ຮ່ວມກັນຢ່າງສັນຕິ ຫລື ສົງຄາມລ້າງຜານ—ປະຫວັດສາດ ໄດ້ຕັ້ງບັນຫາຂຶ້ນແບບນີ້ເທົ່ານັ້ນ".

ການຢູ່ຮ່ວມກັນຢ່າງສັນຕິແມ່ນຫຍັງ ? ກ່ອນອື່ນຫມົດມັນຫມາຍເຖິງ ການ ປະຕິເສດບໍ່ເອົາສົງຄາມເປັນພາຫະນະເພື່ອແກ້ໄຂບັນຫາຜິດຖຽງກັນລະຫວ່າງ ປະເທດຕ່າງໆ, ຫມາຍເຖິງການແກ້ໄຂບັນຫາຜິດຖຽງກັນດັ່ງກ່າວ ດ້ວຍການ ເຈຼລະຈາ. ແຕ່ວ່າເທົ່ານີ້ກໍ່ຍັງບໍ່ທັນກວມເອົາຫມົດທຸກຄວາມຫມາຍຂອງ ການ ຢູ່ຮ່ວມກັນຢ່າງສັນຕິເທື່ອ. ນອກຈາກພັນທະວ່າດ້ວຍການບໍ່ບຸກລຸກກັນແລ້ວ ມັນ ຍັງຫມາຍເຖິງພັນທະຂອງຫມົດທຸກປະເທດ ໃນການບໍ່ລະເມີດຜົນແຜ່ນດິນ ອັນ ຄົບຖ້ວນ ແລະ ອະທິປະໄຕຊຶ່ງກັນແລະກັນ ບໍ່ວ່າພາຍໃຕ້ຮູບການໃດໆ ແລະ ຍ້ອນເຫດຜົນອັນໃດໆເລີຍ. ການຢູ່ຮ່ວມກັນຢ່າງສັນຕິ ຫມາຍເຖິງການບໍ່ແຊກ ແຊງເຂົ້າກິດຈະການພາຍໃນຂອງປະເທດອື່ນໆ ເພື່ອຈຸດປະສົງປ່ຽນແປງ ລະ ບອບແຫ່ງລັດ ຫລືແບບວິທີດຳລົງຊີວິດ ຂອງປະເທດດັ່ງກ່າວ ຫລືຍ້ອນ ສາຍ ເຫດອື່ນໆ, ມັນຫມາຍເຖິງການຮັບຮູ້ສິດທິຂອງປະຊາຊົນແຕ່ລະຊາດ ໃນການ ຕັດສິນບັນຫາການຂະຫຍາຍຕົວ ຂອງປະເທດຕົນເອງດ້ວຍຕົນເອງ.

ການຢູ່ຮ່ວມກັນຢ່າງສັນຕິ ຄາດຫມາຍໃຫ້ປະເທດຕ່າງໆມີສິດສະເຫມີພາບ ກັນ, ມີຄວາມເຂົ້າໃຈຊຶ່ງກັນແລະກັນ ແລະ ມີຄວາມເຊື່ອຫມັ້ນກັນ ແລະ ໃຫ້ ມີການຄຳນຶງເຖິງ ສິດຜົນປະໂຫຍດຂອງກັນແລະກັນ. ໄດ້ມີການຄາດຄະເນ ວ່າ ການພົວພັນຊຶ່ງກັນແລະກັນ ທາງດ້ານການເມືອງແລະເສດຖະກິດ ລະ ຫວ່າງປະເທດຕ່າງໆ ຈະຕ້ອງສ້າງຂຶ້ນບົນພື້ນຖານຄວາມສະເຫມີພາບ ຢ່າງ ເຕັມສ່ວນ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

ການຢູ່ຮ່ວມກັນຢ່າງສັນຕິລະຫວ່າງປະເທດທີ່ມີລະບອບແຕກຕ່າງກັນ ແມ່ນ ແນວທາງລວມ ຂອງນະໂຍບາຍຕ່າງປະເທດ ຂອງປະເທດສັງຄົມນິຍົມ. ນັບ

ແຕ່ມີ້ທຳອິດແຫ່ງການດຳລົງຄົງຕົວຂອງຕົນ ປະເທດໂຊວຽດໄດ້ປ້ອງກັນ ແລະ ຈະສະເຫມີຕົ້ນສະເຫມີປາຍ ໃນການດຳເນີນນະໂຍບາຍຢູ່ຮ່ວມກັນຢ່າງສັນຕິ ລະຫວ່າງ ປະເທດທີ່ມີລະບອບສັງຄົມແຕກຕ່າງກັນ.

ນະໂຍບາຍສັນຕິພາບ ແມ່ນສືບເນື່ອງມາຈາກ ກະໂຕທາດແທ້ຂອງສັງຄົມ ນິຍົມ ແລະ ກໍ່ສອດຄ່ອງກັບສິດຜົນປະໂຫຍດບໍ່ສະເພາະແຕ່ ຂອງປະຊາຊາດ ໃນປະເທດສັງຄົມນິຍົມເທົ່ານັ້ນ ແຕ່ກໍ່ຍັງສອດຄ່ອງກັບສິດຜົນປະໂຫຍດຂອງປະ ຊາຊາດອື່ນໆ ໃນໂລກອີກ. ບັນດາພັກມາກ-ເລນິນ ຖືເອົາການຕໍ່ສູ້ ເພື່ອສັນ ຕິພາບ ຢ່າງສະເຫມີຕົ້ນສະເຫມີປາຍ ບໍ່ສະເພາະເປັນພຽງແຕ່ ການປະຕິບັດ ພັນທະປະຫວັດສາດຂອງຕົນຕໍ່ມວນມະນຸດ (ຄື ກູ້ເອົາປະຊາຊາດ ອອກຈາກ ຖືກການດັບສູນໃນແປວໄຟແຫ່ງສົງຄາມ ນິວເຄລຍ) ເທົ່ານັ້ນ, ແຕ່ກໍ່ຍັງ ຖື ເອົານະໂບບາຍສັນຕິພາບເປັນເງື່ອນໄຂອັນສຳຄັນຍິ່ງ ເພື່ອກໍ່ສ້າງສັງຄົມນິຍົມ ແລະ ລະບອບກອມມູນິດຢ່າງມີໄຊ, ເພື່ອເປີດກວ້າງການຕໍ່ສູ້ປະຕິວັດຂອງຊົນ ຊັ້ນກຳມາຊີບ ໃນປະເທດທຶນນິຍົມ ແລະ ຂະບວນການປົດປ່ອຍຊາດ ຂອງປະ ຊາຊາດ ທີ່ຖືກຈັກກະພັດນິຍົມກົດຂີ່ຂົ່ມເຫັງ.

ຜູ້ປ້ອງກັນສັນຕິພາບແມ່ນຄ້າຍສັງຄົມນິຍົມ ທີ່ມັ່ງຄັ່ງເຂັ້ມແຂງ ຊຶ່ງແມ່ນສະ ຫະພາບໂຊວຽດ ເປັນຜູ້ນຳຫນ້າ. ພ້ອມກັນກັບປະເທດສັງຄົມນິຍົມ ທີ່ມີພົນລະ ເມືອງຈຳນວນຫລາຍກວາ ๑/ມ ຂອງມວນມະນຸດທັງຫມົດ ກໍ່ຍັງມີ ປະເທດ ອື່ນໆອີກຫລາຍໆປະເທດ ທີ່ບໍ່ເປັນສັງຄົມນິຍົມ ແລະ ບໍ່ມີຄວາມສົນໃຈໃນການ ກໍ່ສົງຄາມ ທີ່ຕໍ່ສູ້ເພື່ອສັນຕິພາບ. ຈຳນວນປະເທດເປັນກາງ ທີ່ຕ້ອງການເອົາ ຕົວພົ້ນອອກຈາກໄພອັນຕະລາຍທີ່ມາຈາກການເຂົ້າຮ່ວມ ໃນກຸ່ມທະຫານ ຂອງ ຈັກກະພັດ ກໍ່ນັບມື້ນັບຫລາຍຂຶ້ນ.

ໃນໄລຍະປະຈຸບັນ ປະຊາຊາດນັບມື້ນັບເປັນເຈົ້າການ ໃນການແກ້ໄຂບັນ ຫາວ່າດ້ວຍສົງຄາມ ແລະ ສັນຕິພາບ. ຂະບວນການຕໍ່ສູ້ຕ້ານສົງຄາມ ຂອງ ມວນຊົນແມ່ນປັດໄຈອັນຍິ່ງໃຫຍ່ຂອງການຕໍ່ສູ້ເພື່ອສັນຕິພາບ.ຊົນຊັ້ນກຳມະກອນ ສາກົນ-ນັກຕໍ່ສູ້ຕ້ານສົງຄາມໂລກຜູ້ເດັດດຽວ ແລະ ຜູ້ສະເຫມີຕົ້ນສະເຫມີ ປາຍກວ່າຫມູ່ ເປັນຜູ້ມີບົດບາດເປັນກຳລັງແຮງຈັດຕັ້ງການຕໍ່ສູ້ເພື່ອສັນຕິພາບ..

ແນ່ນອນ ຄວາມອາດສາມາດບໍ່ໃຫ້ເກີດມີສົງຄາມ ບໍ່ອາດຈະເປັນ ໄປໄດ້ ດ້ວຍມັນເອງ. ມັນຮຽກຮ້ອງໃຫ້ມີພະລັງແຮງອັນຍິ່ງໃຫຍ່ ໃນການຕໍ່ສູ້ເພື່ອສັນ

ຕ໊ພາບ, ໃຫ້ມ໊ສະຕ໊ລ໊ະວັງຕ໊ວ໊ຕ໊ກ໊ນອຸບາຍລາຍຫລ໋ຽມຂອງສັດຕູ. ໃນສ່ວນໃຫຍ່ ມັນ໊ມ໊ກ໊ບນະໂຍບາຍຂອງປ໊ະເທດສັງຄົມນ໊ຍົມ, ກ໊ຳລັງແຮງປ້ອງກັນຊາດຂອງ ພວກເຂ໊ົາເຈ້ົາ ແລະ ການປ໊ະຕ໊ບັດ ຫລັກການ ເລນ໊ນ ອ່ານ໊ດ້ວຍການຢູ່ ຮ່ວມ ກັນ ຢ່າງສັນ໊ຕ໊ຢ່າງ ບ໊ຢຸດຢັ້ງ. ສະກັດກັ້ນພວກຮຸກຮານ, ຮັດໃຫ້ ມວນມະນຸດ ຫລຸດພົ້ນອອກຈາກຈັກກະພັດນ໊ຍົມ - ນ໊ແມ່ນພັນທະຂອງອຸ໊ມ ຊັ້ນກ໊ຳມະກອນຂອງ ໝ໊ດທຸກກ໊ຳລັງຕ້ານຈັກກະພັດ ທ໊ດ໊ຳເນ໊ນການ ຕ໊ສູ້ເພ໊ອສັນ໊ຕ໊ພາບ, ເອກະລາດ ແຫ່ງຊາດ ແລະ ສັງຄົມນ໊ຍົມ.

ການແຂ່ງຂັນກັນທາງດ້ານເສດຖະກ໊ດ ລະຫ່ວ່າງສັງຄົມນ໊ຍົມ ກ໊ບ ທ໊ນນ໊ຍົມ

ການຢູ່ຮ່ວມກັນຢ່າງສັນ໊ ກ່ອນ ອ໊ນ ໝ໊ດ ໝາຍເຖ໊ງການແຂ່ງຂັນກັນ-ທາງດ້ານເສດຖະກ໊ດ ລະຫ່ວ່າງ - ສອງລະບອບ, ແລະ ໃນການແຂ່ງຂັນກັນດ່ັງກ່າວ ສັງຄົມນ໊ຍົມນ໊ບ໊ນ໊ບໄດ້ຮ໊ບ ໄຊຊະນະ ອັນໃຫຍ່ຫລວງກ່ວ່າເກ່ົ່າ. ຢູ່ໃນ໊ດລາຍງານຂອງສູນກາງ ພ.ກ. ສ.ຊ ຕ໊ກອງປ໊ະຊຸມໃຫຍ່ຄ້ັ້ງ ທ໊ ๒๓ ຂອງພັກ ໄດ້ບ໊ງ່ໄວ້ວ່າ: "ແນວ ຣ໊ບ ອັນ ຕ໊ດສ໊ນ ໃຈຊາດ ໃນການແຂ່ງຂັນກັນ ກ໊ບທ໊ນນ໊ຍົມ ແມ່ນແນວ ຣ໊ບ ຢູ່ໃນ ອ໊ງເຂດ ເສດຖະກ໊ດ ແລະ ໃນນະໂຍບາຍເສດຖະກ໊ດ ". ໂດຍດ໊ຳເນ໊ນນະໂຍບາຍ ຢູ່ຮ່ວມກັນຢ່າງສັນ໊ ຢ່າງສະ ເໝ໊ ຕ້ນສະ ເໝ໊ປ່າຍປ໊ະເທດສັງຄົມນ໊ຍົມໄດ້ຮັດ ໃຫ້ທ່າແຮງຂອງລະ ບ໊ບສັງຄົມນ໊ຍົມແຫ່ງໂລກ ເຂ້ັ້ມແຂ້ງ ຢ່າງ ບ໊ຢຸດຢັ້ງ ໃນ ການແຂ່ງຂັນກັນທາງດ້ານເສດຖະກ໊ດ ກ໊ບທ໊ນນ໊ຍົມ.

ສະຫລຸບແລ້ວ ຜູ້ທ໊ຈະຊະນະຢູ່ໃນໂລກ ກ໊ຈະແມ່ນລະບອບ ທ໊ເປ໊ດໃຫ້ ປ ະ ຊາຊາດ ມ໊ຄວາມອາດສາມາດຢ່າງໃຫຍ່ຫລວງ ໃນການ ປ ັ ບ ປ ຸ ງ ຊ ໊ວ ິ ດການ - ເປ ັ ນ ຢ ູ ່ ຂ ອ ງ ພ ວ ກ ເ ຂ ົ ້ າ ເ ຈ ້ ົ າ ທ າ ງ ດ ້ ານ ວ ັ ດ ທ ຸ ແ ລ ະ ຄ ິ ດ ໃ ຈ ໃ ຫ ້ ດ ີ ກ ວ ່ ານ ກ ່ ວ ່ າ ເ ກ ່ ົ ່ າ . ລ ະ ບ ອ ບ ແ ນ ວ ນ ິ ຍ ົ ມ ກ ໍ ແ ມ ່ ນ ລ ະ ບ ອ ບ ສ ັ ງ ຄ ົ ມ ນ ິ ຍ ົ ມ . ແ ນ ວ ນ ະ ໂ ຕ ລ ະ ບ ອ ບ ສ ັ ງ ຄ ົ ມ ນ ິ ຍ ົ ມ ນ ັ ້ ນ ເ ອ ງ ທ ີ ່ ສ ້ າ ງ ໃ ຫ ້ ເ ກ ີ ດ ມ ີ ຄ ວ າ ມ ອ າ ດ ສ າ ມ າ ດ ອ ັ ນ ກ ວ ້ າ ງ ຂ ວ າ ງ ເ ພ ່ ◌ ◌ ◌

ແຫ່ງໄວຊະລາອັນສະຫງົບ, ຢາກປະຕິບັດຫົວຄິດອັນກ້າຫານສຸດ ແລະ ກັ່ງ-ກ້າສຸດ ກໍ່ຄືເຮັດໃຫ້ຄວາມໃຝ່ຝັນຂອງຄົນທີ່ຢາກມີສິດທິປະດິດສ້າງໄດ້ຢ່າງມີອິດ ສະຫລະເສລີ ຢ່າງແທ້ຈິງ ເພື່ອສິດຜົນປະໂຫຍດຂອງປະຊາຊົນນັ້ນ ປະກົດຜົນ ເປັນຈິງ.

ຢູ່ໃນການແຂ່ງຂັນກັນທາງດ້ານເສດຖະກິດ ລະຫວ່າງສອງລະບອບ-ທຶນນິ ຍົມ ແລະ ສັງຄົມນິຍົມ ໄຊຊະນະຂອງລະບອບສັງຄົມນິຍົມ ກໍ່ບໍ່ຫມາຍຄວາມ ວ່າ ມັນຈະໄດ້ມາຈາກການແຊກແຊງ ເຂົ້າໃນກິດຈະການພາຍໃນຂອງປະ - ເທດທຶນນິຍົມຈັກດີ້. ໄຊຊະນະດັ່ງກ່າວຈະຕ້ອງອີງໃສ່ທ່າດີເລີດ ຂອງລະບົບ ເສດຖະກິດສັງຄົມນິຍົມ. ຢູ່ໃນຂອບເຂດທົ່ວໂລກ ມັນຈະຕ້ອງແມ່ນລະບອບສັງ ຄົມນິຍົມອັນກ້າວຫນ້າ ແລະ ເປັນທຳ ຄື ລະບອບກອມມູນິດ ທີ່ຈະມາທົດແທນ ທຶນນິຍົມຢ່າງຫລີກເວັ້ນບໍ່ໄດ້.

ການແຂ່ງຂັນກັນທາງດ້ານເສດຖະກິດ ລະຫວ່າງສັງຄົມນິຍົມ ກັບ ທຶນນິ-ຍົມ ບໍ່ແມ່ນຈະເຮັດໃຫ້ມວນຊົນ ຢູ່ໃນປະເທດທຶນນິຍົມຕົກເຂົ້າ ຢູ່ໃນສະພາບ ແຫ່ງການຄອງຄອຍ ແບບເມີນເສີຍບໍ່ເຮັດຫຍັງ, ມັນກໍ່ບໍ່ລົບລ້າງຄວາມຈຳ - ເປັນ ທີ່ຈະຕ້ອງດຳເນີນການຕໍ່ສູ້ຊົນຊັ້ນ ແລະ ການຕໍ່ສູ້ປົດປ່ອຍຊາດ. ກົງກັນ ຂ້າມ ຄວາມຫມາຍສຳຄັນອັນຍິ່ງໃຫຍ່ ກ່ຽວກັບໄຊຊະນະຂອງສັງຄົມນິຍົມ ໃນ ການແຂ່ງຂັນກັນທາງດ້ານເສດຖະກິດ ກັບ ທຶນນິຍົມ ແມ່ນຢູ່ບ່ອນວ່າ ໄຊຊະ ນະດັ່ງກ່າວ ເປັນການປຸກລະດົມ ການຕໍ່ສູ້ຊົນຊັ້ນ ຂອງຊາວຜູ້ອອກ ແຮງງານ ແລະ ເຮັດໃຫ້ພວກເຂົາເຈົ້າ ກາຍເປັນນັກຕໍ່ສູ້ ຜູ້ມີສະຕິຕື່ນຕົວ ເພື່ອປົດປ່ອຍ ຕົນເອງ. ພວກຈັກກະພັດ ເຂົ້າໃຈດີກ່ຽວກັບເລື່ອງນີ້, ພວກເຂົາມີຄວາມ - ຢ້ານກົວຜົນສຳເລັດ ແຫ່ງການຂະຫຍາຍຕົວຂອງປະເທດສັງຄົມນິຍົມ ແລະ ກໍ່ ພະຍາຍາມສະກັດກັ້ນ ການກ້າວເດີນໄປຫນ້າຂອງປະເທດສັງຄົມນິຍົມ.

ຄວາມເວົ້າຂອງ ວ.ອີ. ເລນິນ ທີ່ວ່າ ໄມ້ງັດອັນຕົ້ນຕໍ ແຫ່ງການກະທົບ ໃສ່ການປະຕິວັດໂລກ ຂອງສັງຄົມນິຍົມ ແມ່ນນະໂຍບາຍເສດຖະກິດ ຂອງສັງ ຄົມນິຍົມ, ການສ້າງພື້ນຖານວັດຖຸ-ເຕັກນິກ ຂອງສັງຄົມໃຫມ່ຊຶ່ງລົ້ນກຳລັງ - ການຜະລິດຂອງທຶນນິຍົມ ຍິ່ງມີຄວາມຫມາຍສຳຄັນເປັນພິເສດໃນການແຂ່ງຂັນ ກັນລະຫວ່າງສອງລະບອບໃນໄລຍະປະຈຸບັນ. ເລນິນ ໄດ້ຊີ້ບອກໃຫ້ເຫັນວ່າ: " ພວກເຮົາຈະຕ້ອງແກ້ໄຂບັນຫາດັ່ງກ່າວນີ້ ໃຫ້ຕົກຢ່າງເດັດຂາດ, ແລະໃນ

ເວລານັ້ນພວກເຮົາກໍ່ຖືວ່າໄດ້ມີໄຊ ຢູ່ໃນຂອບເຂດສາກົນຢ່າງແນ່ນອນ ແລະ ຢ່າງສົ້ນເຊີງ ".[1]

ການແຂ່ງຂັນກັນທາງດ້ານເສດຖະກິດ ລະຫວ່າງສັງຄົມນິຍົມ ກັບ ທຶນນິຍົມ ແມ່ນການຕໍ່ສູ້ເພື່ອໃຫ້ມີການຜະລິດອຸດສາຫະກຳ ແລະ ຜະລິດຕະພັນກະສິກຳ ທີ່ຖ້າ ຄິດສະເລ່ຍໃສ່ຫົວຄົນແລ້ວໃຫ້ມີລະດັບສູງກວ່າເກົ່າ ແລະ ເພື່ອຮັບປະກັນໃຫ້ປະຊາຊົນມີລະດັບຊີວິດການເປັນຢູ່ສູງກວ່າເກົ່າ.

ຈະສາມາດຕີລາຄາກ່ຽວກັບການແຂ່ງຂັນກັນທາງດ້ານເສດຖະກິດ ລະຫວ່າງສອງລະບົບ ແລະ ຫມາກຜົນຂອງມັນໄດ້ ໂດຍອີງຕາມຕົວເລກກຳຫນົດ ຫມາຍອັນໃດແດ່ ? ກ່ອນອື່ນຫມົດ, ກໍ່ແມ່ນອີງຕາມຈັງຫວະ ໃນການ ຂະຫຍາຍຕົວທາງດ້ານເສດຖະກິດ. ການແຂ່ງຂັນກັນໃນດ້ານນີ້ ມີການຂະຫຍາຍຕົວໄປຄືແນວໃດ ? ພວກເຂົາຂໍຍົກຕົວເລກ: ໃນໄລຍະ ๑ຈ๕๐ - ๑ຈຊ๐, ການຜະລິດອຸດສາຫະກຳຢູ່ໃນປະເທດສັງຄົມນິຍົມໄດ້ເພີ່ມຂຶ້ນ ๑๔ ເທົ່າ ແຕ່ຢູ່ໃນປະເທດທຶນນິຍົມ ມັນໄດ້ເພີ່ມຂຶ້ນ ມ,ຈ ເທົ່າ. ອັນນີ້ຫມາຍຄວາມວ່າລະບົບ ສັງຄົມນິຍົມແຫ່ງໂລກໄດ້ເສີມຂະຫຍາຍອຸດສາຫະກຳໄວກວ່າທຶນນິຍົມເກືອບ ສີ່ເທົ່າ. ໃນໄລຍະ ๑ຈ๕๑-๑ຈຊ๐ ຈັງຫວະໃນການເພີ່ມທະວີຂຶ້ນຂອງລາຍ ໄດ້ ແຫ່ງຊາດປະຈຳປີ ຜ້ານກາງ ຂອງ ສ.ສ.ສ.ຊ ເທົ່າກັນກັບ ກ,๔% ໃນ ເວລາດຽວກັນຢູ່ສະຫະລັດອາເມລິກາ ແມ່ນເທົ່າກັບ ມ,ມ%; ຂອງການຜະລິດ ອຸດສາຫະກຳ -ຊ,ກ% ໃນເວລາທີ່ຢູ່ສະຫະລັດອາເມລິກາມັນໄດ້ແຕ່ ๔,๐%; ຂອງການຜະລິດກະສິກຳ -ມ,๐% ໃນເວລາທີ່ຢູ່ສະຫະລັດອາເມລິກາ ມັນໄດ້ ແຕ່ ๑,ຜ% .

ຈັງຫວະອັນສູງສົ່ງ ໃນການເຕີບໃຫຍ່ຂະຫຍາຍຕົວ ທາງດ້ານເສດຖະກິດ ແມ່ນສິ່ງຢັ້ງຢືນໃຫ້ເຫັນ ທ່າດີເລີດຂອງລະບົບສັງຄົມນິຍົມແຫ່ງໂລກຢ່າງປະຈັກ ຕາ, ມັນແມ່ນປັດໄຈທີ່ຮັບປະກັນໄຊຊະນະ ຂອງລະບົບສັງຄົມນິຍົມແຫ່ງ ໂລກ ໃນການແຂ່ງຂັນກັນທາງດ້ານເສດຖະກິດ ກັບ ໂລກທຶນນິຍົມ.

ອັນທີສອງ, ກໍ່ແມ່ນຕາມການເຕີບໃຫຍ່ຂະຫຍາຍຕົວ ໃນການຜະລິດຂອງ ໂລກ ຂອງອັດຕາສ່ວນຂອງປະເທດສັງຄົມນິຍົມ. ຖ້າຫາກວ່າ ໃນປີ ๑ຈ๕๐

---

๑) ວ.ອີ.ເລນິນ. ນິພົນຄົບຊຸດ, ເຫລັ້ມ ๔ມ, ຫນ້າ ມ๔๑ .

ພູດຂອງສັງຄົມນິຍົມຢູ່ໃນການຜະລິດອຸດສາຫະກຳຂອງໂລກ ມີແຕ່ ๘๐% ເທົ່າ ນັ້ນ ແຕ່ໃນປີ ๑ຈຊ๐ ມັນໄດ້ເພີ່ມຂຶ້ນລີ່ນ ๔๐% .

ອັນທີສາມ, ກໍ່ແມ່ນຕາມການຜະລິດ ຜະລິດຕະພັນ ປະເພດມີຄວາມ ສຳ ຄັນຍິ່ງເປັນຈຳນວນຄິດສະເລ່ຍໃສ່ຫົວຄົນ. ອັນນີ້ແມ່ນຕົວເລກກຳນົດຫມາຍ - ລວມຍອດ ທີ່ສ່ອງແສງເຖິງລະດັບການຜະລິດ ຄິດສະເລ່ຍໃສ່ຫົວຄົນ ໂດຍ ມີ ການຄິດໄລ່ອອກເປັນຫົວຫນ່ວຍສົມທຽບກັນໄດ້. ໂດຍທົ່ວໄປແລ້ວ ຖ້າຄິດ ໄລ່ ໃສ່ທັງຫມົດລະບົບສັງຄົມນິຍົມແຫ່ງໂລກ ກໍ່ແມ່ນລີ່ນລະດັບການຜະລິດຜ້ານກາງ ຂອງໂລກແລ້ວ. ຢູ່ນີ້ແມ່ນມີປະຊາຊົນ ມ້ມ້,๑% ຂອງພົນລະເມືອງທົ່ວໂລກ , ແຕ່ພັດຜະລິດໄດ້ ๔๐% ຂອງການຜະລິດອຸດສາຫະກຳທົ່ວໂລກ ຊົ່ງໃນນັ້ນຢູ່ - ສ.ສ.ສ.ຊ ມີປະຊາຊົນ ๑/๑๕ ຂອງພົນລະເມືອງໂລກ ແລະມີການຜະລິດ ๑/๕ ຂອງຜະລິດຕະພັນອຸດສາຫະກຳທົ່ວໂລກ. ປະເທດສະມາຊິກ ແສັບ ໄດ້ ຜະລິດລີ່ນລະດັບການຜະລິດອຸດສາຫະກຳທົ່ວໂລກ ຄິດສະເລ່ຍໃສ່ຫົວຄົນ ຮອດ ມ້ ເທົ່າ .

ແຕ່ເຖິງຢ່າງໃດກໍ່ດີ ມາຮອດດຽວນີ້ ປະເທດສັງຄົມນິຍົມກໍ່ຍັງ ຫລຸດ ປະ ເທດທຶນນິຍົມຂະຫຍາຍຕົວຢູ່ ກ່ຽວກັບຕົວເລກກຳນົດຫມາຍດັ່ງກ່າວ.ການຫລຸດ ລີ່ນກັນທາງດ້ານການຜະລິດອຸດສາຫະກຳ ໂດຍຄິດສະເລ່ຍໃສ່ຫົວຄົນລະຫວ່າງ ປະເທດສັງຄົມນິຍົມ ກັບປະເທດທຶນນິຍົມ ນັບມື້ນັບມີການຫຍໍ້ເຂົ້າຢ່າງເປັນປະ ຈຳ .

ອັນທີສີ່, ກໍ່ແມ່ນຕາມຈັງຫວະການເຕີບໃຫຍ່ຂະຫຍາຍຕົວ ຂອງສະມັດຖະ ພາບການອອກແຮງງານ. ກ່ຽວກັບຕົວເລກກຳນົດຫມາຍດັ່ງກ່າວ ລະດັບການ ຫລຸດລີ່ນກັນ ລະຫວ່າງປະເທດສັງຄົມນິຍົມ ກັບ ປະເທດທຶນນິຍົມຂະຫຍາຍຕົວ ກໍ່ໄດ້ມີການຫລຸດຫນ້ອຍຖອຍລົງຢ່າງປະຈັກຕາ.ໃນໄລຍະ ๑ຈ๕๐-๑ຈຊ๐ ສະ ມັດຖະພາບຂອງການອອກແຮງງານ (ຄິດສະເລ່ຍໃສ່ຫົວຄົນຜູ້ເຮັດວຽກ ຄົນ ຫນຶ່ງ) ໃນຂະແຫນງການອຸດສາຫະກຳ ຂອງ ສ.ສ.ສ.ຊ ໄດ້ເພີ່ມ ຂຶ້ນ ๕,ມ້ ເທົ່າ ໃນເວລາທີ່ຢູ່ ສະຫະລັດອາເມລິກາ ມັນໄດ້ເພີ່ມຂຶ້ນ ๘,๕ ເທົ່າ ຢູ່ອັງກິດ -๘,๘ ເທົ່າ, ຢູ່ຝະລັ່ງ -ມ້,ຜ້ ເທົ່າ, ຢູ່ ສາທາລະນະລັດ ສະຫະ ພັນເຢຍລະມັນ -ມ້,๕ ເທົ່າ. ແຕ່ເຖິງຢ່າງໃດກໍ່ດີ ລະດັບການຫລຸດສະຫະລັດ ອາເມລິກກາກ່ຽວກັບຕົວເລກກຳນົດຫມາຍດັ່ງກ່າວ ກໍ່ຍັງຫລວງຫລາຍຢູ່. ຢູ່

ສ.ສ.ສ.ຊ ໃນປີ ໑໙໘໐ ສະມັດຖະພາບຂອງການອອກແຮງງານ ຢູ່ໃນ-ຂະແໜງການອຸດສາຫະກຳໄດ້ເທົ່າກັນກັບ ๕๔% ຂອງລະດັບສະມັດຖະພາບຂອງການອອກແຮງງານຢູ່ສະຫະລັດອາເມລິກາ.

ອັນທີ້ສາ, ກໍ່ແມ່ນຕາມລະດັບຊົ່ວຄາວເປັນຢູ່ຂອງປະຊາຊົນ. ການເພີ່ມລະດັບຄວາມຢູ່ດີກິນດີຂອງປະຊາຊົນ ແມ່ນກົດໜົມ ແຫ່ງການຂະຫຍາຍຕົວຂອງເສດຖະກິດ.ໃນປີ ໑໙໘໐ ລາຍໄດ້ແຫ່ງຊາດຢູ່ ສ.ສ.ສ.ຊ ໄດ້ເພີ່ມຂຶ້ນ ๕ ລົ້ນລະດັບໃນປີ ໑໙๕໐ ๘,๕ ເທົ່າ, ໃນປະເທດສະມາຊິກ ແລັບ ປະເທດ ອື່ນໆ ມັນໄດ້ເພີ່ມຂຶ້ນຈາກ ๔,๗ ເທົ່າ ຮອດ ๑๔ ເທົ່າ ໃນເວລາທີ່ ໃນໄລ ຍະດ່ຽງກ່າວ ຢູ່ສະຫະລັດອາເມລິກາ ລາຍໄດ້ແຫ່ງຊາດ ໄດ້ເພີ່ມຂຶ້ນ ๔,๗ ເທົ່າ, ຢູ່ອັງກິດ-๔,๐ ເທົ່າ, ຢູ່ຝະລັ່ງ ๓,๘ ເທົ່າ. ການເພີ່ມທະວີ ຂຶ້ນ ຂອງລາຍໄດ້ແຫ່ງຊາດແມ່ນພື້ນຖານເພື່ອຍົກລະດັບຊົ່ວຄາວເປັນຢູ່ຂອງປະຊາ ຊົນຂຶ້ນຢ່າງບໍ່ຢຸດຢັ້ງ ແລະ ທັ້ງແມ່ນພື້ນຖານເພື່ອໃຫ້ການຜະລິດສັງຄົມນິຍົມຂະ ຫຍາຍຕົວດ້ວຍຈັງຫວະອັນສູງສົ່ງ.

ໂຄງການເພີ່ມທະວີລະດັບຊົ່ວຄາວເປັນຢູ່ຂອງປະຊາຊົນໂຊວຽດຊຸ່ງກອງ ປະຊຸມໃຫຍ່ຄັ້ງທີ ๒๗ ຂອງ ພ.ກ.ສ.ຊ ໄດ້ວາງອອກມານັ້ນ ເປັນສິ່ງ ຢັ້ງ ຢືນໃຫ້ເຫັນຢ່າງປະຈັກຕາວ່າ ວັດຖຸປະສົງຂອງສັງຄົມນິຍົມ ແມ່ນການຕອບສະ ໜອງ ຄວາມຮຽກຮ້ອງຕ້ອງການອັນນັບມື້ທະວີຄູນຂຶ້ນຂອງປະຊາຊົນໃຫ້ ໄດ້ ຢ່າງເຕັມສ່ວນກວ່າເກົ່າ.

ຄຳຖາມເພື່ອທວນຄືນ

๑. ລະບົບສັງຄົມນິຍົມແຫ່ງໂລກ ໄດ້ກຳເນີດຂຶ້ນ ແລະ ໄດ້ຂະຫຍາຍ ຕົວ ຄື ແນວໃດ ?

๒. ຈົ່ງວ່າເຖິງລັກສະນະສະເພາະ ຂອງການພົວພັນເສດຖະກິດແບບ ໃໝ່ ລະຫວ່າງປະເທດສັງຄົມນິຍົມນຳກັນ.

๓. ການແບ່ງງານລະຫວ່າງປະເທດສັງຄົມນິຍົມ ແມ່ນດຳເນີນໄປຄືແນວໃດ?

๔. ຮູບການພື້ນຖານແຫ່ງການຮ່ວມມື ເສດຖະກິດ ລະຫວ່າງປະເທດສັງຄົມນິ ຍົມ ມີອັນໃດແດ່ ?

๕. ສະພາຊ່ວຍເຫລືອຊຶ່ງກັນແລະກັນທາງດ້ານເສດຖະກິດດຳເນີນງານຄືແນວ

ໄດ ?

ຜ. ການສົ່ມຮ່ວມເສດຖະກິດ ແບບສັງຄົມນິຍົມ ແມ່ນຫຍັງ ?

ກ. ການຢູ່ຮ່ວມກັນຢ່າງສັນຕິ ຫມາຍເຖິງອັນໃດ ?

ຊ. ການແຂ່ງຂັນກັນທາງດ້ານເສດຖະກິດ ແບບສັນຕິວິທີ ລະຫວ່າງ ສັງຄົມນິ ຍົມ ກັບ ທຶນນິຍົມຫມາຍເຖິງອັນໃດ ແລະ ມັນມີອະນາຄົດກວ້າງໄກ ຄື ແນວໃດ ?

ຜ. ການແຂ່ງຂັນກັນ ທາງດ້ານເສດຖະກິດ ລະຫວ່າງສັງຄົມນິຍົມ ກັບ ທຶນນິ ຍົມ ແມ່ນດຳເນີນໄປຕາມທິດສຳຄັນອັນໃດແດ່ ?

24/VII
ຫ້ານຈຳໜ່າຍ

ພາກ ສິບແປດ

ກິດເກນ ເສດຖະກິດ
ວ່າດ້ວຍ ການຂະຫຍາຍຕົວຂົ້ນເທື່ອລະກ້າວ
ຈາກສັງຄົມນິຍົມ ໄປເປັນລະບອບກອມມູນິດ

ໂຄງການດຳເນີນງານຂອງ ພ.ກ.ສ.ຊ. ໄດ້ຍົ່ງໄວ້ວ່າ " ລະບອບ - ກອມມູນິດ ແມ່ນລະບອບສັງຄົມແບບບໍ່ມີຊົນຊັ້ນ ທີ່ມີກຳມະສິດເອກະພາບ ຂອງ ທ້ອງປວງຊົນກ່ຽວກັບພາຫະນະການຜະລິດ, ຢູ່ໃນລະບອບສັງຄົມນິຍົມອັນນີ້ໝົດ ທຸກຄົນຢູ່ໃນສັງຄົມ ລ້ວນແຕ່ມີຄວາມສະເໝີພາບກັນ ທາງດ້ານສັງຄົມ ຢ່າງ ເຕັມສ່ວນ ແລະ ຄຽງຄູ່ກັບການຂະຫຍາຍຕົວຢ່າງຮອບດ້ານຂອງຄົນແລ້ວ ກຳ ລັງການຜະລິດ ກໍ່ຈະທະວີຄູນຂົ້ນ ບົນພື້ນຖານວິທະຍາສາດ ແລະ ເຕັກນິກ ທີ່ ຂະຫຍາຍຕົວໄປຢູ່ເລື້ອຍໆ, ໝົດທຸກບໍ່ເກີດແຫ່ງຄວາມຮັ່ງມີຂອງສັງຄົມ ກໍ່ຈະ ຖືກນຳໃຊ້ຢ່າງເຕັມສ່ວນ ແລະ ກໍ່ຈະໄດ້ມີການປະຕິບັດຫລັກການອັນຍິ່ງໃຫຍ່ທີ່ ວ່າ: " ເຮັດຕາມຄວາມສາມາດ ຊົມໃຊ້ຕາມຄວາມຕ້ອງການ ". ລະບອບ ກອມມູນິດ ແມ່ນສັງຄົມປະເພດມີການຈັດຕັ້ງໃນລະດັບສູງ ທີ່ປະກອບດ້ວຍຊາວ ຜູ້ອອກແຮງງານ ຜູ້ໝົດສະຫລະພາບ ແລະ ມີຄວາມຕື່ນຕົວ. ຢູ່ໃນສັງຄົມນິ ລະບອບການຊຸ້ມຄອງຂອງສັງຄົມດ້ວຍຕົນເອງ ກໍ່ຈະຍົ່ງຍືນຕົວ, ການອອກ ແຮງງານຮັບໃຊ້ສັງຄົມກໍ່ຈະກາຍມາເປັນຄວາມຮຽກຮ້ອງຕ້ອງການອັນເປັນ - ຕາຍອັນດັບໜຶ່ງ ແລະ ເປັນຄວາມຈຳເປັນທີ່ໝົດທຸກຄົນຊາບຊຶ້ມ, ແຕ່ລະຄົນ

ຈະໄດ້ໝູນໃຊ້ຄວາມສາມາດຂອງຕົນເພື່ອໃຫ້ເປັນຜົນດີແກ່ປະຊາຊົນໃນລະດັບສູງສຸດ".

ລະບອບກອມມູນິດ ແມ່ນເຕີບໃຫຍ່ຂຶ້ນມາຈາກສັງຄົມນິຍົມ ແລະ ກໍ່ ແມ່ນການສືບທອດສັງຄົມນິຍົມໂດຍກົງ. ສັງຄົມນິຍົມ ແລະ ລະບອບກອມມູນິດແມ່ນສອງໄລຍະແຫ່ງການຂະຫຍາຍຕົວຂອງຮູບຖານສັງຄົມ-ເສດຖະກິດ ແບບກອມມູນິດອັນດຽວ, ມັນມີທັງຈຸດລວມ ແລະ ກໍ່ມີທັງຈຸດແຕກຕ່າງກັນຢ່າງ ຫລວງຫລາຍ.

๑. ຈຸດລວມທາງດ້ານເສດຖະກິດແລະຈຸດແຕກຕ່າງກັນ ລະຫວ່າງສັງຄົມນິຍົມກັບລະບອບກອມມູນິດ

ຈຸດລວມຂອງສັງຄົມນິຍົມແລະ ລະບອບກອມມູນິດ

ພື້ນຖານເສດຖະກິດ ຂອງສັງຄົມນິຍົມ ແລະ ລະບອບກອມມູນິດ ແມ່ນການສ້ອມລວມກ່ຽວກັບພາຫະນະການຜະລິດ. ການຜະລິດວັດຖຸສິ່ງຂອງ ລ້ວນແຕ່ດຳເນີນໄປເພື່ອຮັບໃຊ້ສິດຜົນປະໂຫຍດ ຂອງທັງໝົດສັງຄົມ.

ພາຍໃຕ້ລະບອບສັງຄົມນິຍົມກໍ່ດີ ພາຍໃຕ້ລະບອບກອມມູນິດ ບໍ່ມີພວກ ຊົນຊັ້ນຊຸດຮິດ ແລະ ບໍ່ມີຄົນຊຸດຮິດຄົນ, ບໍ່ມີການກີດໝວງສັນຊາດ ແລະການກີດໝວງຊົນຊາດ. ລັກສະນະສະເພາະຂອງການພົວພັນແຫ່ງການຜະລິດຢູ່ໃນໄລຍະທີໜຶ່ງ ແລະ ໃນໄລຍະສູງສຸດຂອງສັງຄົມກອມມູນິດ ແມ່ນບັນຫາການຮ່ວມມື ຖານິດສະຫາຍ ແລະ ການຊ່ວຍເຫລືອຊຶ່ງກັນແລະກັນ ລະຫວ່າງ ບຸກຄົນທີ່ໄດ້ຮັບການປົດປ່ອຍ ອອກຈາກແອກຊຸດຮິດ.

ລັກສະນະສະເພາະ ສຳລັບສັງຄົມນິຍົມ ກໍ່ຄືສຳລັບລະບອບກອມມູນິດແມ່ນການເຕີບໃຫຍ່ຂະຫຍາຍຕົວ ຂອງການຜະລິດ ຂອງສັງຄົມ ຢ່າງເມືອງນິດ - ລຽນຕິດ ບົນພື້ນຖານຄວາມກ້າວໜ້າທາງດ້ານວິທະຍາສາດ-ເຕັກນິກ ເພື່ອຈຸດປະສົງຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໝົດທຸກຄົນຢູ່ໃນສັງຄົມ ໃຫ້ໄດ້ຢ່າງເຕັມສ່ວນກວ້າງ.

ລັກສະນະສະເພາະຂອງທັງສອງໄລຍະ ໃນຮູບຖານກອມມູນິດ ແມ່ນການ

ຂະຫຍາຍຕົວຢ່າງມີແຜນການ ຂອງເສດຖະກິດແຫ່ງຊາດ ຊຸ່ງຮັບປະກັນ ເຮັດ ໃຫ້ການຜະລິດເຕີບໃຫຍ່ຂະຫຍາຍຕົວດ້ວຍຈັງຫວະອັນໝັ້ນທ່ຽງ ແລະເຮັດໃຫ້ ມີການນຳໃຊ້ຊັບພະຍາກອນທາງດ້ານວັດຖຸ ແລະ ແຮງງານຂອງສັງຄົມ ຢ່າງ ຖືກຕ້ອງເໝາະສົມ ກໍ່ເຮັດໃຫ້ສະພັດຖະພາບຂອງການອອກແຮງງານມີການ ເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ.

ພາຍໃຕ້ລະບອບສັງຄົມນິຍົມ ແລະ ລະບອບກອມມູນິດ ແມ່ນບໍ່ມີການ ຂັດ ແຍ່ງກັນ ລະຫວ່າງຕົວເມືອງກັບຊົນນະບົດ, ລະຫວ່າງການອອກແຮງງານ - ດ້ວຍມັນສະໝອງ ກັບ ການອອກແຮງງານດ້ວຍຮ່າງກາຍ.

ຢູ່ໃນທັງສອງໄລຍະຂອງຮູບຖານກອມມູນິດ ການອອກແຮງງານມີລັກສະ-ນະອິດສະຫລະເສລີ ແລະ ປະດິດສ້າງ. ຈຸດລວມສຳລັບທັງສອງໄລຍະ ກໍ ຄື ໜ້າທີ່ອັນດຽວກັນ ສຳລັບໝົດທຸກຄົນຢູ່ໃນສັງຄົມ ແມ່ນ ການອອກແຮງງານ ຕາມຄວາມສາມາດ.

ມີຈຸດລວມກັນ ຂອງສັງຄົມນິຍົມ ແລະ ລະບອບກອມມູນິດ.

ຄຽງຄູ່ກັບຈຸດລວມຂອງສອງໄລຍະດັ່ງກ່າວ ຂອງສັງຄົມກອມມູນິດ ກໍ່ຍັງມີ ທັງຈຸດແຕກຕ່າງກັນອີກ.

ຈຸດແຕກຕ່າງກັນທີ່ເປັນພື້ນຖານລະຫວ່າງ ລະບອບກອມມູນິດກັບສັງຄົມນິຍົມ	ຈຸດແຕກຕ່າງກັນທີ່ເປັນພື້ນຖານ ລະຫວ່າງລະບອບກອມມູນິດກັບ ສັງຄົມນິຍົມ ມາຈາກບ່ອນທີ່ວ່າ

ສັງຄົມກອມມູນິດ ມີລະດັບຄວາມສຸກງອມທາງດ້ານເສດຖະກິດ ແລະ ວັດທະ ນະທຳບໍ່ສະໝ່ຳສະເໝີກັນ ໃນຂັ້ນຕ່ຳສຸດ ແລະ ໃນຂັ້ນສູງສຸດແຫ່ງການຂະ-ຫຍາຍຕົວຂອງມັນ.

ລະບອບກອມມູນິດ ມີຄວາມແຕກຕ່າງຈາກສັງຄົມນິຍົມ ກ່ອນອື່ນໝົດ ກໍ ແມ່ນຢູ່ບ່ອນທີ່ມັນມີກຳລັງການຜະລິດຂະຫຍາຍຕົວຢູ່ໃນລະດັບທີ່ສູງກວ່າ ຢ່າງບໍ່ ທຽບກັນໄດ້. ສັງຄົມກອມມູນິດ ຈະມີພື້ນຖານວັດຖຸ ແລະ ເຕັກນິກທີ່ເຂັ້ມແຂງ ແລະ ທັນສະໄໝກວ່າຕັ້ງຫລາຍເທົ່າ ອັນນັ້ນເປັນເງື່ອນໄຂຊ່ວຍໃຫ້ ສາມາດ ຍົກສະພັດຖະພາບຂອງການອອກແຮງງານຂັ້ນສູ່ລະດັບອັນບໍ່ມີທີ່ຍັງຈະມາທຽບ-ໄດ້ ແລະ ຮັບປະກັນໃຫ້ມີຄວາມຮັ່ງມີທາງດ້ານວັດຖຸ ແລະ ຈິດໃຈຢ່າງ ມາກ

ມາຍກ່າຍກອງ. ພາຍໃຕ້ລະບອບກອມມູນິດ ໄດ້ມີການຍົນລຸ ເຖິງການຈັດຕັ້ງ ເສດຖະກິດຂອງທັງໝົດສັງຄົມຢ່າງມີແຜນການໃນລະດັບສູງສຸດ, ໄດ້ມີການ-ຮັບປະກັນ ໃຫ້ມີການນຳໃຊ້ຄວາມຮັ່ງມີທາງດ້ານວັດຖຸ ແລະ ຊັບພະຍາກອນ ທາງດ້ານແຮງງານຢ່າງມີປະສິດທິຜົນ ແລະ ຢ່າງສົມເຫດສົມຜົນກວ່າເກົ່າ , ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການອັນນັບມື້ທະວີຄູນຂຶ້ນຂອງໝົດທຸກ ຄົນຢູ່ໃນສັງຄົມ.

ລັກສະນະສະເພາະຂອງການພົວພັນແຫ່ງການຜະລິດ ພາຍໃຕ້ລະບອບ - ກອມມູນິດ ແມ່ນຢູ່ບ່ອນວ່າ ມັນຈະມີຄວາມສຸກງອມທາງດ້ານເສດຖະກິດ ຢູ່ໃນ ລະດັບທີ່ສູງກວ່າ. ຖ້າຫາກວ່າພາຍໃຕ້ລະບອບສັງຄົມນິຍົມ ກຳມະສິດຂອງສັງ ຄົມ ໄດ້ປະກົດຕົວອອກມາພາຍໃຕ້ສອງຮູບການ- ຂອງລັດ ແລະ ຂອງສະຫະ ກອນ ແຕ່ພາຍໃຕ້ລະບອບກອມມູນິດ ມັນກໍຈະມີແຕ່ກຳມະສິດກອມມູນິດ ຂອງ ທ່ວປວງຊົນ ທີ່ເປັນເອກະພາບກັນ. ພາຍໃຕ້ລະບອບສັງຄົມນິຍົມ ການມີ ກຳ ມະສິດຂອງສັງຄົມໃນສອງຮູບການ ເປັນສາຍເຫດພາໃຫ້ມີສອງຊົນຊັ້ນເພື່ອນ-ມິດນັ້ນ ຄື ຊົນຊັ້ນກຳມະກອນ ແລະ ຊົນຊັ້ນຊາວນາລວມໝູ່. ເມື່ອກ້າວ ໄປ ເຖິງກຳມະສິດກອມມູນິດ ຂອງທ່ວປວງຊົນ ທີ່ເປັນເອກະພາບແລ້ວ ພົ້ນ ຖານ ເສດຖະກິດເພື່ອໃຫ້ມີຊົນຊັ້ນຕ່າງໆ ແລະ ມີຄວາມແຕກຕ່າງກັນທາງຊົນຊັ້ນ ກໍ ໄດ້ຕົກໄປ ຄວາມແຕກຕ່າງກັນ ລະຫວ່າງຕົວເມືອງກັບຊົນນະບົດ ທາງດ້ານ-ສັງຄົມ-ເສດຖະກິດ ແລະ ດ້ານວັດທະນາທຳ- ຊຶ່ດປະຈຳວັນກໍຈະສູນ ຫາຍ ໄປ.

ເຕັກນິກການຜະລິດ ຍິ່ງໄດ້ຮັບການປັບປຸງດັດແກ້ເທົ່າໃດ, ລະດັບວັດທະ ນະທຳ- ເຕັກນິກ ຂອງຊາວຜູ້ອອກແຮງງານ ຍິ່ງສູງຂຶ້ນເທົ່າໃດ ມັນກໍຈະ - ເກີດມີການປະສົມເຂົ້າກັນ ແບບກາຍອິນຊີ ລະຫວ່າງການອອກແຮງງານດ້ວຍ ມັນສະໜອງ ກັບ ການອອກແຮງງານດ້ວຍຮ່າງກາຍ ຢູ່ໃນການເຄື່ອນໄຫວ-ແຫ່ງການຜະລິດຂອງຄົນ. ປັນຍາຊົນ ກໍຈະເຊົ້າເປັນຊົນຄົນສະເພາະ, ອີງ ຕາມລະດັບວັດທະນະທຳ-ເຕັກນິກຂອງຕົນ ຊາວຜູ້ອອກແຮງງານດ້ວຍ ຮ່າງ ກາຍກໍຈະກ້າວຂຶ້ນໄປທຽມທັນກັບລະດັບຂອງຊາວຜູ້ອອກແຮງງານ ດ້ວຍມັນສະ ໜອງ.

ພາຍໃຕ້ລະບອບກອມມູນິດ ລັກສະນະຂອງການອອກແຮງງານກໍຈະມີການ

ປ່ຽນແປງ. ພາຍໃຕ້ລະບອບສັງຄົມນິຍົມການອອກແຮງງານ ຍັງບໍ່ທັນໄດ້ເປັນ ຄວາມຮຽກຮ້ອງຕ້ອງການອັນເປັນຕາຍອັນດັບໜຶ່ງເທື່ອ, ຢູ່ໃນສັງຄົມນິຍົມຍັງ ມີຄົນປະເພດທີ່ຢາກໄດ້ຮັບຫລາຍໆຈາກສັງຄົມ ແຕ່ພັດບໍ່ຢາກອອກແຮງງານ - ແບບສັດຊື່ ແລະ ຢ່າງໃຊ້ໝົດຄວາມສາມາດຂອງຕົນ. ພາຍໃຕ້ລະບອບກອມ ມູນິດ ການອອກແຮງງານແບບອິດສະຫລະເສລີ ແລະ ປະດິດສ້າງ,ການອອກ ແຮງງານເພື່ອຮັບໃຊ້ທັງໝົດສັງຄົມ ໄດ້ກາຍເປັນ ຄວາມຮຽກຮ້ອງຕ້ອງການ ອັນເປັນຕາຍອັນດັບໜຶ່ງ.

ໃນຂະບວນວິວັດແຫ່ງການກ້າວຂ້ຶນຈາກສັງຄົມນິຍົມ ໄປຫາລະບອບ ກອມ ມູນິດ ມັນກໍມີການສືບຕໍ່ປັບປຸງ ຮູບການແຈກຢາຍຄວາມຮັ່ງມີ ທາງດ້ານວັດຖຸ ແລະ ວັດທະນະທຳ ລະຫວ່າງຄົນຢູ່ໃນສັງຄົມ. ຄວາມອຸດົມຮັ່ງມີທາງດ້ານວັດ ຖຸຢ່າງມາກມາຍກາຍກອງ ແບບກອມມູນິດ, ການຫັນປ່ຽນການອອກແຮງງານ ມາເປັນຄວາມຮຽກຮ້ອງຕ້ອງການ ອັນເປັນຕາຍອັນດັບໜຶ່ງ ໄດ້ເປັນເງື່ອນ-ໄຂອຸ່ວຍໃຫ້ສາມາດກ້າວຂ້ຶນຈາກຫລັກການຂອງສັງຄົມນິຍົມທີ່ວ່າ " ແຮັດ ຕາມ ຄວາມສາມາດ ຈຸມໃຊ້ຕາມແຮງງານ " ໄປຫາຫລັກການຂອງລະບອບກອມ ມູນິດທີ່ວ່າ " ແຮັດຕາມຄວາມສາມາດ ຈຸມໃຊ້ຕາມຄວາມຕ້ອງການ " . ການ ພົວພັນແບບສະເໝີພາບກັນ ຕໍ່ພາຫະນະການຜະລິດ ແລະ ຕໍ່ການອອກແຮງ-ງານ ກໍຈະເພີ່ມຂ້ຶນດ້ວຍການພົວພັນ ແບບສະເໝີພາບກັນ ໃນການແຈກຢາຍ ຄວາມຮັ່ງມີທາງດ້ານວັດຖຸ ໂດຍສອດຄ່ອງກັບຄວາມຮຽກຮ້ອງຕ້ອງການອັນສົມ ເຫດສົມຜົນ ຂອງຄົນຜູ້ໜຶ່ງ ທີ່ມີລະດັບທາງດ້ານວັດທະນະທຳ.

ພາຍໃຕ້ລະບອບກອມມູນິດ ການຜະລິດສິນຄ້າ ແລະ ປະເພດເສດຖະກິດ ທີ່ຕົດພັນກັບມັນຊຸ່ມ- ສິນຄ້າ, ເງິນ, ລາຄາ, ເງິນເດືອນ, ການເຄື່ອນ ໄຫວເສດຖະກິດແບບກຸ້ມຕົ໋ວເອງ ແລະ ມີຜົນກຳໄລ, ສິນເຊື່ອ, ການເງິນກໍ ຈະສູນຫາຍຕາຍໄປ.

ລະບອບກອມມູນິດ ແມ່ນຮູບການຈັດຕັ້ງອັນສູງສຸດໃນຊີວິດສັງຄົມ. ພ່ານ - ການວິວັດແຫ່ງການກ້າວຂ້ຶນສູ່ລະບອບກອມມູນິດ ການພົວພັນ ແຫ່ງການຜະລິດ ແບບສັງຄົມນິຍົມ ກໍຂະຫຍາຍຕົວ ແລະ ໄດ້ຮັບການປັບປຸງດັດແກ້ມັນກໍຈະເຮັດ ໃຫ້ການປ່ຽນແປງເກີດຂ້ຶນ ທັງໃນດ້ານໂຄງຂ້ຶນ: ສະຖາບັນການເມືອງ ແລະ ກົດໝາຍ, ຮູບການຮັບຮູ້ສັງຄົມ ກໍຈະໄດ້ຮັບການຂະຫຍາຍຕົວໃນຂ້ຶນຕໍ່ໄປ .

ລະບອບແຫ່ງລັດສັງຄົມນິຍົມ ກໍຈະຂະຫຍາຍຕົວກ້າວອ້ົມໄປເປັນລະບອບ ການ ຈັດຕັ້ງສັງຄົມດ້ວຍຕົນເອງ ແບບກອມມູນິດ.

ເມື່ອມີການກ້າວອ້ົມສູ່ລະບອບກອມມູນິດ ປະຊາຊາດກໍ ຍ່ອມຈະມັບມ້ ມັບ ຫຍັບເຂົ້າໃກ້ກັນຢ່າງຮອບດ້ານບົນພື້ນຖານ ຈຸດລວມທາງດ້ານສິດຜົນປະໂຫຍດ ເສດຖະກິດ, ການເມືອງ ແລະ ຈິດໃຈ, ນິດຕະພາບຖານອ້າຍນ້ອງ ແລະ ການຮ່ວມມືກັນລະຫວ່າງປະຊາຊາດ.

ແຕ່ເຖິງຢ່າງໃດກໍດີ, ເຖິງວ່າຈະມີຄວາມແຕກຕ່າງກັນ ລະຫວ່າງລະ - ບອບກອມມູນິດ ກັບສັງຄົມນິຍົມກໍຕາມ, ແຕ່ມັນກໍ່ບໍ່ມີກຳແພງອັນໃດເລີຍທີ່ແຍກ ສອງໄລຍະດັ່ງກ່າວ ແຫ່ງການຂະຫຍາຍຕົວຂອງສັງຄົມອອກຈາກກັນ. ມາຮອດ ດຽວນ້ີ ກໍອາດຈະເວົ້າໄດ້ກ**ຽ**ວກັບໜໍ່ແໜມ ຂອງລະບອບກອມມູນິດ ທີ່ພວມ ສຸກ ງອມຢູ່ໃນທ້ອງຂອງສັງຄົມນິຍົມ. ຕົວຢ່າງ, ຢູ່ໃນສັງຄົມ ສັງຄົມນິຍົມ ກໍໄດ້ ເກີດມີ ການຂະຫຍາຍຮູບການອອກແຮງງານ ແລະ ການຈັດຕັ້ງ ການຜະລິດ ແບບກອມມູນິດ, ຮູບການຂອງສັງຄົມກ**ຽ**ວກັບການຕອບສະໜອງ ຄວາມຮຽກ ຮ້ອງຕ້ອງການ ຂອງຊາວຜູ້ອອກແຮງງານເຊັ່ນ: ທຶນຂອງສັງຄົມ ເພື່ອ ການ ຊຸມໃຊ້, ໂຮງຮຽນກິນນອນ, ເຮືອນຝາກເດັກ, ໂຮງຮຽນອະນຸບານ ແລະ ອ້ນໆ. ມາຮອດດຽວນ້ີ ກໍໄດ້ມີຮູບຮ່າງຂອງລະບອບກອມມູນິດ ຫລາຍອັນ - ຫລາຍແນວ ປະເພດທີ່ຮູ້ສຶກໄດ້ ແລະ ເຫັນໄດ້ຢ່າງປະຈັກຕາ ຈຶ່ງໄດ້ມີ ການ ຂະຫຍາຍຕົວ ແລະ ໄດ້ຮັບການປັບປຸງ.

ກິດເໜ ວ່າດ້ວຍການຂະຫຍາຍຕົວ ກ້າວອ້ົມຈາກສັງຄົມສັງຄົມນິຍົມ ໄປເປັນສັງຄົມກອມມູນິດ	• ສັງຄົມກອມມູນິດ ແມ່ນສັງຄົມທີ່ ເປັນ ທຳ ແລະ ດີເລີດກວ່າໝູ່ໃນ ໂລກ. ການກໍ່ສ້າງສັງຄົມກອມມູນິດແມ່ນອຸດົມ ຄະຕິສຸດຍອດ ຂອງພັກກອມມູນິດແລະ ພັກກຳມະກອມຕ່າງໆ.

ການຂະຫຍາຍຕົວກ້າວອ້ົມ ຈາກສັງຄົມນິຍົມ ໄປເປັນສັງຄົມກອມມູນິດ - ແມ່ນການວັດແຫ ງປະຫວັດສາດ ທີ່ມີລັກສະນະກິດເໜ ຈຶ່ງບໍ່ອາດຈະມ້ວງເຜ ຫລ ຫລີກເວ້ັນໄດ້ຕາມລຳພັງໃຈຢ່າງເດັດຂາດ.

ເຖິງຫຍັ້ງກໍ່ຕາມແລ້ວວ່າ ການກ້າວອ້ົມຈາກທຶນນິຍົມ ໄປຫາສັງຄົມນິຍົມ -

ແມ່ນດຳເນີນໄປ ທ່ານກາງການຕໍ່ສູ້ຊົນຊັ້ນ, ມັນຮຽກຮ້ອງໃຫ້ມີ ການມ້າງເພ ການພົວພັນຢູ່ໃນສັງຄົມຢ່າງເຖິງກົກເຖິງຮາກ ແລະ ໃຫ້ມີການປະຕິວັດ ທາງ ດ້ານສັງຄົມ ຢ່າງເລິກເຊິ່ງ ແລະ ຮອບດ້ານ.

ການກ້າວຂ້ຶນ ຈາກສັງຄົມນິຍົມ ໄປສູ່ສັງຄົມກອມມູນິດ ພັດເປັນອີກ ແບບ ໜຶ່ງ. ການຂະຫຍາຍຕົວກ້າວຂ້ຶນຈາກສັງຄົມນິຍົມ ໄປສູ່ສັງຄົມກອມມູນິດແມ່ນ ດຳເນີນໄປ ໂດຍບໍ່ມີການປະຕິວັດທາງດ້ານສັງຄົມ ເພາະວ່າ ລະບອບສັງຄົມ ນິຍົມ ແລະ ລະບອບກອມມູນິດ ແມ່ນສອງໄລຍະຂອງຮູບຖານສັງຄົມ-ເສດຖະ ກິດ ຂອງກອມມູນິດອັນໜຶ່ງອັນດຽວກັນ. ການກ້າວຂ້ຶນສູ່ລະບອບກອມມູນິດ - ແມ່ນດຳເນີນໄປໃນສະພາບການບໍ່ມີຊົນຊັ້ນຊຸດຮຶດ ເມື່ອໝົດທຸກຄົນຢູ່ໃນສັງຄົມ ກຳມະກອນ, ຊາວນາ, ປັນຍາຊົນ ຫາກມອງເຫັນວ່າ ການກໍ່ສ້າງສັງຄົມ - ກອມມູນິດ ແມ່ນຜົນປະໂຫຍດອັນເປັນຕາຍຂອງຕົນ.

ຖ້າຫາກວ່າໃນເງື່ອນໄຂປະຫວັດສາດໃດໜຶ່ງສະເພາະເຈາະຈົ່ງ ບາງ ປະເທດຊາດໄດ້ກ້າວຂ້ຶນແລ້ວ ແລະ ອີກບາງປະຊາຊາດ ພັດພວມກ້າວ ຂ້ຶນ ສັງຄົມນິຍົມ ໂດຍບໍ່ຜ່ານໄລຍະຂະຫຍາຍຕົວຂອງທຶນນິຍົມກໍຕາມ ແຕ່ບໍ່ອາດຈະ ມີປະເທດໃດເລີຍ ທີ່ຈະສາມາດກ້າວຂ້ຶນລະບອບກອມມູນິດໄດ້ ໂດຍບໍ່ ຂ້ຶນ ຜ່ານໄລຍະຂະຫຍາຍຕົວຂອງສັງຄົມນິຍົມ. ການກໍ່ສ້າງສັງຄົມນິຍົມ ແລະ ລະ ບອບກອມມູນິດ ແມ່ນຂະບວນວິວັດແຫ່ງການຂະຫຍາຍຕົວຢ່າງເປັນເອກະພາບ. ການກ້າວຂ້ຶນຈາກສັງຄົມນິຍົມ ໄປສູ່ລະບອບກອມມູນິດ ແມ່ນດຳເນີນໄປ ເປັນ ກ້າວໆ ແລະ ຢ່າງເໜື່ອງນິດລຽນຕິດ. ການຂະຫຍາຍຕົວກ້າວຂ້ຶນເປັນກ້າວໆ ຈາກສັງຄົມນິຍົມ ໄປສູ່ສັງຄົມກອມມູນິດ ແມ່ນກົດເກນພາວະວິໄສ ແລະ ແມ່ນ ສັງຄົມສັງຄົມນິຍົມ ທີ່ໄດ້ກະກຽມສ້າງໃຫ້ມັນເກີດມີໄດ້.

ບໍ່ອາດຈະກ້າວຂ້ຶນສັງຄົມກອມມູນິດໄດ້ຢ່າງດັດຂາດ ຖ້າຫາກວ່າບໍ່ທັນ ມີ ການສ້າງເງື່ອນໄຂອັນຈຳເປັນຂ້ຶນມາກ່ອນ ໝາຍຄວາມວ່າຖ້າຫາກວ່າບໍ່ ທັນ ໄດ້ຍົນລຸເຖິງຄວາມຮັ່ງມີທາງດ້ານວັດຖຸຢ່າງມາກມາຍກ່າຍກອງ, ບໍ່ທັນໄດ້ ມີ ການສ້າງປະຖົມປັດໄຈທາງດ້ານວັດຖຸ ແລະ ຈິດໃຈຂອງໄລຍະທີ່ສອງຂອງຮູບ ຖານກອມມູນິດ ຊຶ່ງໃນນັ້ນຈະມີຄວາມສາມາດດຳລົງຊີວິດ ແລະ ເຮັດວຽກ - ງານແບບກອມມູນິດ.

ໃນໄລຍະກໍ່ສ້າງສັງຄົມກອມມູນິດ, ອຸດສາຫະກຳ, ການກະສິກຳແບບໃຊ້

ເຄື່ອງຈັກ ເຄື່ອງລາງຸກະເສດຂະໜາດໃຫຍ່ ແລະ ທັງໝົດເສດຖະກິດແລະ ວັດທະນະທຳ ລ້ວນແຕ່ຂະຫຍາຍຕົວໄປຢ່າງວ່ອງໄວ ໂດຍມີຊາວຜູ້ອອກ ແຮງ ງານເປັນລ້ານໆຄົນເຂົ້າຮ່ວມຢ່າງຕັ້ງໜ້າຕ້າວທັນ ແລະ ຢ່າງຕື່ນຕົວ.

ການກໍ່ສ້າງສັງຄົມກອມມູນິດ ບໍ່ແມ່ນຂະບວນວັດແບບຕາມມີຕາມເກີດ ແຕ່ ມັນຫາກແມ່ນໜາກຜົນຈາກຫົວຄິດປະດິດສ້າງ ຂອງຊາວຜູ້ອອກແຮງງານເປັນ ຈຳນວນຫລວງຫລາຍ ແລະ ທັງແມ່ນໜາກຜົນຂອງການເຂົ້າຮ່ວມ ໃນການ-ເສີມຂະຫຍາຍການຜະລິດຂອງສັງຄົມ, ວັດທະນະທຳ ແລະ ວິທະຍາສາດ ຢ່າງຕັ້ງໜ້າຕ້າວທັນ ແລະ ຢ່າງຕື່ນຕົວຂອງພວກເຂົາເຈົ້າ.

ການກໍ່ສ້າງສັງຄົມກອມມູນິດ ແມ່ນອີງໃສ່ຄວາມຮູ້ກ່ຽວກັບກົດເກນພາວະວິ ໄສ ແລະ ອີງໃສ່ການໝູນໃຊ້ກົດເກນດັ່ງກ່າວ ອັນນັ້ນເປັນເງື່ອນໄຂຊ່ວຍໃຫ້ ສັງຄົມສັງຄົມນິຍົມ ສາມາດເລືອກເອົາເສັ້ນທາງ ແລະ ວິທີການດຳເນີນການ ດັດສ້າງກອມມູນິດ ໃນໄລຍະທີ່ສັ້ນກວ່າເກົ່າ ແລະ ມີປະສິດທິຜົນກວ່າເກົ່າ.

ການກໍ່ສ້າງສັງຄົມ ສັງຄົມນິຍົມຂະຫຍາຍຕົວ, ລະດັບການຂະຫຍາຍ ຕົວ ທີ່ສູງຂຶ້ນ ຂອງກຳລັງການຜະລິດ ແລະ ຂອງການພົວພັນແຫ່ງການຜະລິດແບບ ສັງຄົມນິຍົມ, ການກ້າວໜ້າຂະຫຍາຍຕົວ ຂອງວິທະຍາສາດ ແລະ ວັດທະ ນະທຳ ແມ່ນປະຖົມປັດໄຈເພື່ອຈະກໍ່ສ້າງພື້ນຖານ-ເຕັກນິກ ຂອງລະບອບກອມ ມູນິດຢູ່ ສ.ສ.ສ.ຊ.

ບັນດາປະເທດສັງຄົມນິຍົມ ກ້າວ ອັ້ນສູ່ລະບອບກອມມູນິດ ເກືອບວ່າ ໃນເວລາດຽວກັນ

ການກ້າວອັ້ນຈາກສັງຄົມ ສັງຄົມນິຍົມໄປ ສູ່ສັງຄົມກອມມູນິດ ແມ່ນຫລີກເວັ້ນ ບໍ່ໄດ້ ສຳລັບທຸກໆປະເທດທີ່ໄດ້ກ້າວເຂົ້າສູ່ເສັ້ນ ທາງກໍ່ສ້າງສັງຄົມນິຍົມ. ການກໍ່ສ້າງສັງ ສັງຄົມກອມມູນິດຢູ່ ສ.ສ.ສ.ຊ ແມ່ນພາກສ່ວນປະກອບອັນໜຶ່ງ ຂອງການ - ສ້າງສາ ສັງຄົມກອມມູນິດ ຂອງປະຊາຊາດ ໃນປະເທດທີ່ນອນຢູ່ໃນລະບົບສັງ ຄົມນິຍົມແຫ່ງໂລກ. ຍ້ອນວ່າກຳລັງແຮງຢູ່ໃນສັງຄົມ ແມ່ນ ຈຸ່ມຈຸ້ນກຳມະກອນ ຊາວນາລວມໝູ, ປັນຍາຈຸ່ມຂອງຊາດ ແລະ ຮູບການເຄື່ອນໄຫວເສດຖະກິດ ຂອງສັງຄົມ (ວິສາຫະກິດທີ່ສ້າງຂຶ້ນຢູ່ບົນພື້ນຖານກຳມະສິດສັງຄົມນິຍົມໃນສອງ ຮູບການ), ລ້ວນແຕ່ເປັນຮູບດຽວກັນຢູ່ ສະຫະພາບໂຊວຽດ ແລະ ຢູ່ໃນ ປະ

ເທດສັງຄົມນິຍົມອື່ນໆ ດັ່ງນັ້ນກົດເກນພື້ນຖານອ່າດ້ວຍການກໍ່ສ້າງສັງຄົມກອມມູ
ນິດຢູ່ ສ.ສ.ສ.ຊ ແລະ ຢູ່ປະເທດເຫລົ່ານີ້ ຈຶ່ງເປັນກົດເກນອັນລວມກັນແຕ
ປະຕິບັດໄປໂດຍມີການຄຳນຶງເຖິງຈຸດພິເສດທາງດ້ານປະຫວັດສາດ ແລະທາງ
ດ້ານຊາດຂອງແຕ່ລະປະເທດ.

ປະຈຸບັນນີ້ ບັນດາປະເທດສັງຄົມນິຍົມ ພວມຢູ່ໃນໄລຍະແຫ່ງການຂະ -
ຫຍາຍຕົວອັນແຕກຕ່າງກັນ. ສະຫະພາບໂຊວຽດໄດ້ກໍ່ສ້າງສັງຄົມ ສັງຄົມນິຍົມ
ຂະຫຍາຍຕົວແລ້ວ. ປະເທດສັງຄົມນິຍົມອື່ນໆ ພັດຢູ່ໃນຂັ້ນພວມຈະສຳເລັດຫລື
ໃນສ່ວນໃຫຍ່ກໍ່ແມ່ນໄດ້ຢູ່ໃນຂັ້ນສຳເລັດການກໍ່ສ້າງສັງຄົມນິຍົມແລ້ວ. ຈາກນັ້ -
ຈຶ່ງເຫັນໄດ້ຢ່າງປະຈັກຕາວ່າ ມັນມີລະດັບແຕກຕ່າງກັນ, ມີຂັ້ນບໍ່ເທົ່າທຽມກັນ
ໃນການຂະຫຍາຍຕົວ ແລະ ໃນຄວາມສຸກງອມຂອງສັງຄົມນິຍົມ ຢູ່ໃນປະເທດ
ຕ່າງໆ ໃນລະບົບສັງຄົມນິຍົມແຫ່ງໂລກ.

ລະບົບສັງຄົມນິຍົມແຫ່ງໂລກ ຮັບປະກັນໃຫ້ມີຄວາມອາດສາມາດນຳໃຊ້ທ່າ
ດີເລີດ ຂອງສັງຄົມນິຍົມ ເພື່ອຍົ້ໄລຍະການກໍ່ສ້າງສັງຄົມນິຍົມ ຂອງໝົດທຸກ
ປະເທດລົງ, ມັນເປີດຊ່ອງທາງໃຫ້ບັນດາປະເທດສັງຄົມນິຍົມ ມີຄວາມອາດ
ສາມາດກ້າວອົ້ນສັງຄົມກອມມູນິດ ເກືອບວ່າໃນເວລາດຽວກັນ, ໃນຂອບເຂດ
ແຫ່ງຍຸກສະໄໝປະຫວັດສາດອັນໜຶ່ງອັນດຽວກັນ. ພື້ນຖານເສດຖະກິດທີ່ພາໃຫ້
ບັນດາປະເທດສັງຄົມນິຍົມ ກ້າວອົ້ນສັງຄົມກອມມູນິດ ເກືອບວ່າໃນເວລາດຽວ
ກັນ, ໃນຂອບເຂດຂອງຍຸກສະໄໝປະຫວັດສາດອັນໜຶ່ງອັນດຽວກັນນັ້ນ ແມ່ນ
ການສ້າງປະຖົມປັດໄຈທາງດ້ານວັດຖຸ ເພື່ອກໍ່ສ້າງສັງຄົມກອມມູນິດ ບົນພື້ນ -
ຖານການອອກແຮງງານເພື່ອສ້າງສາຂອງປະຊາຊົນໃນແຕ່ລະປະເທດແລະບົນ
ພື້ນຖານການເພີ່ມທະວີການປະກອບສ່ວນຂອງປະຊາຊົນ ຂອງແຕ່ລະ ປະເທດ
ເຂົ້າໃນພາລະກິດລວມແຫ່ງການປັບປຸງລະບົບສັງຄົມນິຍົມໃຫ້ເຂັ້ມແຂງ ຢ່າງ
ເປັນປະຈຳ ແລະ ທັງແມ່ນບັນຫາການຮວມມືອັນມັ່ນຄົງເຂັ້ມແຂງແຮງກ້າອົ້ນ
ຕົ້ນ ແລະ ການຊ່ວຍເຫລືອຊຶ່ງກັນແລະກັນລະຫວ່າງປະເທດສັງຄົມນິຍົມ.

ການກ້າວອົ້ນສັງຄົມກອມມູນິດ ເກືອບໃນເວລາດຽວກັນ ບໍ່ໝາຍຄວາມ -
ວ່າສະຫະພາບໂຊວຽດທີ່ເປັນປະເທດທຳອິດ ທີ່ໄດ້ເລີ່ມລົ້ມກໍ່ສ້າງສັງຄົມກອມ
ມູນິດ ຈະຈອງຖ້ຳການກ້າວເດີ່ນຂອງຕົນໄວ້ ເພື່ອຮັດໃຫ້ປະເທດອື່ນໆ ທີ່ຍັງ
ຢູ່ທາງຫລັງຟັ້ນໄດ້ມີໂອກາດແລ່ນອົ້ນໄປທັນຕົນໄດ້. ມັນຄວນຈະຕ້ອງຮັດແລະ

ກໍ່ຈະມີການຮັດໃຫ້ລະດັບສະໜໍ່າສະເໜີກັນດ້ວຍວິຖີທາງເສີມຂະຫຍາຍຢ່າງ ໄວວາກວ່າເກົ່າ ບັນດາປະເທດທີ່ຂະຫຍາຍຕົວຫລຸດໜ່ຽ ທາງດ້ານເສດຖະກິດ ແລະ ແກ້ໄຂເອົາປະເທດດັ່ງກ່າວຂັ້ນໃຫ້ເຖິງລະດັບຂອງປະເທດທີ່ຂະຫຍາຍ-ຕົວກວ່າໜ່ຽ. ຮັດແນວນີ້ໄດ້ ໜົດທຸກປະເທດສັງຄົມນິຍົມຈຶ່ງຈະພ້ອມກັນກ້າວ ເດີນໄປແບບເປັນໜ້າກະດານເອກະພາບກັນ ຕາມເສັ້ນທາງກໍ່ສ້າງສັງຄົມ - ກອມມູນິດ.

ລະບອບກອມມູນິດ ແມ່ນຄວາມໃຝ່ຝັນຂອງມວນມະນຸດ ມາໄດ້ຫລາຍ ສະ ຕະວັດແລ້ວ. ມວນມະນຸດທັງໜົດຈະຕ້ອງກ້າວຂັ້ນລະບອບກອມມູນິດອັນນີ້ແມ່ນ ໜາກຜົນອັນຫລີກເວັ້ນບໍ່ໄດ້ ຂອງການຂະຫຍາຍຕົວຂອງສັງຄົມ.

๔. ການກໍ່ສ້າງພື້ນຖານວັດຖຸ-ເຕັກນິກຂອງສັງຄົມ ກອມມູນິດ

ການກໍ່ສ້າງພື້ນຖານວັດຖຸ-ເຕັກນິກ ຂອງສັງຄົມກອມມູນິດ ແມ່ນເງື່ອນໄຂ ຈຳເປັນ ເພື່ອກ້າວຂັ້ນຈາກສັງຄົມນິຍົມ ໄປສູ່ສັງຄົມກອມມູນິດ. ອັນນີ້ ໜາຍ ຄວາມວ່າ ກຳລັງການຜະລິດຂອງສັງຄົມຈະຕ້ອງກ້າວຂັ້ນໄປ ເຖິງການຂະ-ຫຍາຍຕົວ ໃນຂັ້ນໃໝ່ ທີ່ສູງກວ່າເກົ່າ, ກຳລັງການຜະລິດ ຈະຕ້ອງຮັບປະ ກັນໃຫ້ໄດ້ຮັບສະມັດຖະພາບຂອງການອອກແຮງງານໃນລະດັບສູງສຸດ, ໃຫ້ໄດ ມີຄວາມຮັ່ງມີທາງດ້ານວັດຖຸ ແລະ ວັດທະນະທຳຢ່າງມາກມາຍກາຍກອງແລະ ໃຫ້ສາມາດກ້າວຂັ້ນເປັນກ້າວໆ ໄປຫາການແຈກຢາຍຕາມຄວາມຕ້ອງການ.

ອີງຕາມຂະໜາດ ແລະ ລະດັບເຕັກນິກຂອງມັນແລ້ວ ພື້ນຖານວັດຖຸ - ເຕັກນິກ ຂອງສັງຄົມກອມມູນິດ ຈະລົ້ນພົ້ນຖານວັດຖຸ-ເຕັກນິກ ຂອງສັງຄົມນິ ຍົມຕັ້ງເທົ່າໃດເທົ່າພຸ້ນ. ມັນມີການກໍ່ສ້າງພາກສ່ວນປະກອບຂອງພື້ນຖານວັດຖຸ ເຕັກນິກຂອງສັງຄົມກອມມູນິດ ຕະຫລອດຮອດຢູ່ໃນສັງຄົມ ສັງຄົມນິຍົມ. ຍ້ອມ ແນວນີ້ ໜ້າທີ່ແມ່ນຢູ່ບອນອາ ຮັດແນວໃດເປີດທາງຢ່າງກ້ວາງຂວາງ ເພື່ອ ສືບຕໍ່ປັບປຸງ ແລະ ເສີມຂະຫຍາຍມັນຕື່ມ ບົນພື້ນຖານ ການເສີມຂະຫຍາຍ ຄວາມກ້າວໜ້າທາງດ້ານວິທະຍາສາດ-ເຕັກນິກດ້ວຍຈັງຫວະອັນສູງສົ່ງ ການ ສົມຮ່ວມຢ່າງສະໜິດແໜ້ນລະຫວ່າງວິທະຍາສາດ ກັບ ການຜະລິດ ແມ່ນ ຄວາມຮຽກຮ້ອງຕ້ອງການອັນຮີບດ່ວນຂອງຍຸກສະໄໝປະຈຸບັນ.

ຄັ່ງໄດ້ບົ່ງໄວ້ຢູ່ໃນໂຄງການດຳເນີນງານ ຂອງ ພ.ກ.ສ.ຊ ການກໍ່ສ້າງພື້ນຖານວັດຖຸ-ເຕັກນິກ ຂອງລະບອບກອມມູນິດ " ໝາຍເຖິງ: ການ-ຕິດຕັ້ງໄຟຟ້າຢ່າງຄົບຖ້ວນໃນທົ່ວປະເທດ ແລະ ບົນພື້ນຖານດັ່ງກ່າວແມ່ນການ ປັບປຸງເຕັກນິກ, ເຕັກໂນໂລຢີ ແລະ ການຈັດຕັ້ງການຜະລິດຂອງສັງຄົມຢູ່ໃນ ໝົດທຸກຂະແໜງການຂອງເສດຖະກິດແຫ່ງຊາດ; ການປະກອບກົນຈັກ ຢ່າງ ຄົບວຸດເຂົ້າໃນການຜະລິດ ແລະ ການຫັນປ່ຽນມັນໄປເປັນອັດຕະໂນມັດ ຢ່າງ ເຕັມເມັດເຕັມໜ່ວຍກ່ອາເກົ່າ, ການນຳໃຊ້ເຄມີຢ່າງກ້ວາງຂວາງເຂົ້າ ໃນ ເສດຖະກິດແຫ່ງຊາດ, ການເສີມຂະຫຍາຍຢ່າງສຸດຂີດ ຂະແໜງການຜະລິດ ອັນໃໝ່ ປະເພດນີປະສິດທິພົນສູງ ທາງດ້ານເສດຖະກິດ ແລະ ພະລັງງານ-ໄຟຟ້າ ແລະ ພັດສະດຸແບບໃໝ. ການນຳໃຊ້ຈຸບພະຍາກອນທຳມະຊາດ, ພື້ນ ຖານທາງດ້ານວັດຖຸ ແລະ ແຮງງານຢ່າງຮອບດ້ານ ແລະ ຢ່າງຖືກຕ້ອງ - ເໝາະສົມ, ການປະສົມເຂົ້າກັນແບບກາຍອິນຊີລະຫວ່າງວິທະຍາສາດ ກັບ ການຜະລິດ ແລະ ການເສີມຂະຫຍາຍຄວາມກ້າວໜ້າທາງດ້ານວິທະຍາສາດ ເຕັກນິກດ້ວຍຈັ່ງຫວະອັນວ່ອງໄວ, ລະດັບວັດທະນະທຳ-ເຕັກນິກ ອັນສູງຂອງ ຊາວຜູ້ອອກແຮງງານ, ການລົ້ມກາຍພວກປະເທດນາຍທຶນທີ່ຂະຫຍາຍຕົວກ່ວາ ໝູ່ຢ່າງຫລວງຫລາຍທາງດ້ານສະມັດຖະພາບ ຂອງການອອກແຮງງານ ນັ້ນ ເປັນເງື່ອນໄຂອັນສຳຄັນຍິ່ງ ເພື່ອຮັບປະກັນໄຊຊະນະຂອງລະບອບກອມມູນິດ"

ເສັ້ນທາງກໍ່ສ້າງພື້ນຖານ ວັດຖຸ-ເຕັກນິກ ຂອງລະ ບອບກອມມູນິດ

ໜຶ່ງໃນເສັ້ນທາງອັນສຳຄັນຍິ່ງແຫ່ງການກໍ່ສ້າງ ພື້ນຖານວັດຖຸ-ເຕັກນິກ ຂອງລະບອບກອມມູນິດ ແມ່ນການຕິດຕັ້ງໄຟຟ້າໃນທົ່ວປະເທດຢ່າງເຕັມ ສ່ວນ. ການຕິດຕັ້ງໄຟຟ້າມີບົດບາດນຳໜ້າ - ເພື່ອຮັບປະກັນໃຫ້ມີຄວາມກ້າວໜ້າທາງດ້ານວິທະຍາສາດ-ເຕັກນິກ. ການ ຕິດຕັ້ງໄຟຟ້າຢ່າງເຕັມສ່ວນ ຈະຊ່ວຍໃຫ້ສາມາດເກີດມີການປ່ຽນແປງ ຢ່າງ ເລິກເຊິ່ງທາງດ້ານເຕັກນິກ ແລະ ເຕັກໂນໂລຢີ ໃນໝົດທຸກຂະແໜງ ການ ຊຸດສາຫະກຳ, ການກະສິກຳ, ການຂົນສົ່ງ ແລະ ຊີວິດປະຈຳວັນຂອງປະຊາ ຊົນໃນຕົວເມືອງ ແລະ ຊົນນະບົດ.

ຢູ່ ສ.ສ.ສ.ຊ ຈະໄດ້ມີການກໍ່ສ້າງລະບົບພະລັງງານໄຟຟ້າເອກະພາບ

ທີ່ຈະຊ່ວຍໃຫ້ສາມາດສົ່ງພະລັງງານໄຟຟ້າ ຈາກເຂດທີ່ຢູ່ພາກຕາເວັນອອກໄປ ໃຫ້ເຂດທີ່ຢ່ພາກເອີລົບຂອງປະເທດ. ລະບົບພະລັງງານໄຟຟ້າເອກະພາບຂອງ ສ.ສ.ສ.ຊ ຈະຕິດຈອດເຂົ້າກັນກັບລະບົບພະລັງງານໄຟຟ້າ ຂອງປະເທດສັງ ຄົມນິຍົມອື່ນໆ.

ການສືບຕໍ່ເສີມຂະຫຍາຍຂະແໜງການອຸດສາຫະກຳກໍ່ສ້າງກົນຈັກ, ການ ເສີມຂະຫຍາຍການຜະລິດແບບເລັ່ງລັດຢ່າງສຸດຂີດ ລະບົບອັດຕະໂນມັດ ແລະ ເຄື່ອງຈັກອັດຕະໂນມັດ, ພາຫະນະອັດຕະໂນມັດ, ເຕເລເມການິກ ແລະ - ເອເລັກໂຕຣນິກ ກໍ່ຄືເຄື່ອງຈັກວັດແທກທີ່ມີລະດັບຄວາມຊັດເຈນສູງ ລ້ວນແຕ່ມີ ຄວາມໝາຍສຳຄັນອັນຍິ່ງໃຫຍ່ ເພື່ອການກໍ່ສ້າງພື້ນຖານວັດຖຸ-ເຕັກນິກຂອງ ລະບອບກອມມູນິດ.

ບົນພື້ນຖານການເສີມຂະຫຍາຍຂະແໜງການອຸດສາຫະກຳ ຜະລິດກົນຈັກ ນັ້ນ ຈະໄດ້ມີການປະກອບກົນຈັກຢ່າງຄົບຊຸດ ເຂົ້າໃນອຸດສາຫະກຳ, ການກະ ສິກຳ, ການກໍ່ສ້າງ, ການຂົນສົ່ງ, ວຽກງານຂຸ່ນຖ່າຍ ແລະ ວຽກງານ ຄຸ້ມ ຄອງບໍລິການຕ່ວເມືອງ. ການປະກອບກົນຈັກຢ່າງຄົບຊຸດ ຈະກວມເອົາ ການ ຜະລິດໃນໝົດທຸກຂັ້ນ ແລະ ໃນໝົດທຸກການວ່ວັດຂອງມັນ, ມັນຈະພາ ໄປ ເຖິງບ່ອນມີການລົບລ້າງການອອກແຮງງານດ້ວຍຕົນມື ບ່ວ່າຢູ່ໃນພາກ ວຽກ ງານຕົ້ນຕໍ ກໍ່ຄືຢູ່ໃນວຽກງານສຳຮອງ.

ການປະກອບກົນຈັກຢ່າງຄົບຊຸດ ເປັນການກະກຽມສ້າງພື້ນຖານ ເພື່ອຈະ ກ້າວຂຶ້ນສູ່ການຜະລິດແບບໃຊ້ລະບົບອັດຕະໂນມັດ. ຖ້າຫາກວ່າ ມີພຽງ ແຕ່ ພາກສ່ວນປະກອບຂອງການຜະລິດ ແບບໃຊ້ລະບົບອັດຕະໂນມັດເທົ່ານັ້ນ ຢູ່ໃນ ພື້ນຖານວັດຖຸ-ເຕັກນິກຂອງສັງຄົມນິຍົມ ແຕ່ຜ່ານການກໍ່ສ້າງພື້ນຖານວັດຖຸ - ເຕັກນິກ ຂອງລະບອບກອມມູນິດ ລະບົບເຄື່ອງຈັກແບບອັດຕະໂນມັດ ຈະຕ້ອງ ກາຍເປັນລະບົບທີ່ບົດບາດຄອບຄອງເປັນເຈົ້າ. ການປະກອບລະບົບ ອັດຕະ ໂນມັດ ແລະ ການປະກອບກົນຈັກຢ່າງຄົບຊຸດລ້ວນແຕ່ເປັນພື້ນຖານ ທາງດ້ານ ວັດຖຸ ເພື່ອເຮັດໃຫ້ການອອກແຮງງານສັງຄົມນິຍົມຂະຫຍາຍຕົວກ້າວຂຶ້ນ ໄປ-ເປັນການອອກແຮງງານກອມມູນິດ. ເມື່ອມີການປະກອບລະບົບອັດຕະໂນມັດ, ລັກສະນະການອອກແຮງງານກໍ່ມີການປ່ຽນແປງ, ລະດັບວັດທະນະທຳ- ເຕັກ ນິກຂອງກຳມະກອນ ກໍ່ມີການເພີ່ມທະວີສູງຂຶ້ນຕາມ ແລະ ກໍ່ມີທ່ວງການສ້າງ -

ເງື່ອນໄຂ ເພື່ອລົບລ້າງບໍ່ໃຫ້ມີການແຕກຕ່າງກັນຢ່າງຫລວງຫລາຍ ລະຫວ່າງ ການອອກແຮງງານດ້ວຍມັນສະຫມອງ ກັບ ການອອກແຮງງານດ້ວຍຮ່າງກາຍ. ການປະກອບກົນຈັກຢ່າງຄົບຊຸດ ແລະ ການປະກອບລະບົບອັດຕະໂນມັດ ເຂົ້າ ໃນການຜະລິດ ລ້ວນແຕ່ເປັນພາຫະນະທີ່ມີບົດບາດຕັດສິນຊີ້ຂາດ ເພື່ອຮັບປະ ກັນໃຫ້ມີຄວາມກ້າວຫນ້າທາງດ້ານວິທະຍາສາດ-ເຕັກນິກຢູ່ໃນເສດຖະກິດແຫ່ງ ຊາດ.

ການນຳໃຊ້ເຄມີເຂົ້າໃນເສດຖະກິດແຫ່ງຊາດ ມີຄວາມຫມາຍ ອັນສຳຄັນ ຍິ່ງ ເພື່ອຈະກໍ່ສ້າງພື້ນຖານວັດຖຸ-ເຕັກນິກ ຂອງລະບອບກອມມູນິດ. ການນຳ ໃຊ້ເຄື່ອງເຄມີ ແລະ ພັດສະດຸປະເພດທຽມ ເຮັດໃຫ້ມີຄວາມອາດສາມາດດຳ ເນີນການດັດສ້າງທາງດ້ານຄຸນນະພາບຢູ່ໃນຂົງເຂດອັນນຳຫນ້າ ຂອງການຜະ ລິດວັດຖຸຢ່າງເຖິງຖອງ. ການດັດສ້າງດັ່ງກ່າວ ເປັນເງື່ອນໄຂຊ່ວຍໃຫ້ ສາ ມາດເພີ່ມທະວີການຜະລິດຂຶ້ນຢ່າງຫລວງຫລາຍ ພ້ອມທັງຍົກລະດັບຂອງ ການ ຜະລິດຂຶ້ນຕື່ມ ໂດຍມີການປັບປຸງທາງດ້ານການລົງທຶນພື້ນຖານ ແລະ ມີການ ຫລຸດຜ່ອນການໃຊ້ຈ່າຍໃນການຜະລິດໃນເວລາດຽວກັນ.

ການເສີມຂະຫຍາຍອຸດສາຫະກຳເຄມີຢ່າງເລັ່ງລັດ, ການເພີ່ມທະວີການ ຜະລິດຝຸ່ນວິທະຍາສາດ ແລະ ທາດເຄມີປ້ອງກັນພືດພັນຕ່າງໆຢ່າງຫລວງຫຼາຍ ລ້ວນແຕ່ເປັນປັດໄຈອັນສຳຄັນຍິ່ງ ເພື່ອຈະຍູ້ຫນູນການກະສິກຳຂຶ້ນ. ຖ້າ ຫາກ ວ່າບໍ່ມີເຄມີ ກໍ່ບໍ່ອາດຈະເຮັດກະເສດສຸມໄດ້ ແລະ ຈາກນີ້ກໍ່ຈະບໍ່ມີ ການເພີ່ມ ທະວີການເກັບກ່ຽວພືດພັນທັນຍາຫານ, ການຜະລິດຊີ້ນ, ນຳ້ນົມ ແລະ ສະ ບຽງອື່ນໆຂຶ້ນຢ່າງຫລວງຫລາຍໄດ້.

ການເພີ່ມທະວີການຜະລິດໂລຫະ ແລະ ເຊື້ອເພີງ, ການເສີມຂະຫຍາຍ ອຸດສາຫະກຳຫນັກລ້ວນແຕ່ມີຄວາມຫມາຍສຳຄັນອັນໃຫຍ່ຫລວງ ເພື່ອຈະກໍ່ສ້າງ ພື້ນຖານວັດຖຸ-ເຕັກນິກ ຂອງລະບອບກອມມູນິດ. ໂດຍສະເພາະ ມັນພົວພັນ ເຖິງ ຂະແຫນງການພື້ນຖານຂອງອຸດສາຫະກຳຫນັກ ແລະ ກ່ອນອື່ນຫມົດ ກໍ່ ແມ່ນຂະແຫນງການອຸດສາຫະກຳຜະລິດເຊື້ອເພີງ-ພະລັງງານໄຟຟ້າ.

ການປັບປຸງການຈັດຕັ້ງການຜະລິດ ເຊັ່ນ ການແບ່ງເຂດການຜະລິດແລະ ການສຳພັນການຜະລິດ ກໍ່ຄືການປັບປຸງການຈັດຕັ້ງການປະສົມປະສານ ວິສາ ຫະກິດ ທີ່ດຳເນີນການຜະລິດໃກ້ຄຽງກັນ ລ້ວນແຕ່ມີຄວາມຫມາຍສຳຄັນ ອັນ

ໃຫຍ່ຫລວງ ເພື່ອຈະກໍ່ສ້າງພື້ນຖານວັດຖຸ-ເຕັກນິກ ຂອງລະບອບກອມມູນິດ.

ການກໍ່ສ້າງພື້ນຖານວັດຖຸ-ເຕັກນິກ ຂອງລະບອບກອມມູນິດ ຄາດໝາຍໃຫ້ມີການນຳໃຊ້ໝາກຜົນທັງໝົດ ຂອງຄວາມກ້າວໜ້າທາງດ້ານວິທະຍາ - ສາດ-ເຕັກນິກ ແລະ ບົດຮຽນອັນກ້າວໜ້າທາງດ້ານກະສິກຳ ເຂົ້າໃນຕົວຈິງ ຢ່າງກ້ວາງຂວາງ. ການຍູ້ໜູນກຳລັງການຜະລິດ ຂອງການກະສິກຳຂັ້ນຢ່າງ ແຂງແຮງ ຈະຊ່ວຍໃຫ້ສາມາດແກ້ໄຂໄດ້ສອງໜ້າທີ່ຕົນຕໍ ໜ້ການພົວພັນ ຊຶ່ງ ກັນ ແລະ ກັນ ຢ່າງສະໜິດແໜ້ນນັ້ນກໍ່ຄື: ກ)ໜ້າທີ່ກ້າວໄປເຖິງການຜະ ລິດສະບຽງອາຫານ ປະເພດໜຶ່ງ ສຳລັບປະຊາຊົນ ແລະ ວັດຖຸ ດິບສຳລັບອຸດສາຫະກຳ ໃຫ້ໄດ້ຢ່າງມາກມາຍກາຍກອງ; ຂ) ໜ້າທີ່ຮັບປະ ກັນຮັດໃຫ້ຊົນນະບົດຄ່ອຍໆມີການຫັນປ່ຽນໄປສູ່ການພົວພັນ ທາງດ້ານສັງຄົມ ແບບກອມມູນິດ, ລຶບລ້າງບໍ່ໃຫ້ມີຄວາມແຕກຕ່າງກັນຢ່າງຫລວງຫລາຍ ລະ ຫວ່າງຕົວເມືອງ ກັບ ຊົນນະບົດ. ຂໍ້ມູນແຈເພື່ອຈະແກ້ໄຂໜ້າທີ່ອັນຍິ່ງ ໃຫຍ່ ດັ່ງກ່າວນີ້ໃຫ້ຕົກ ແມ່ນການຮັດກະເສດສຸມ ທີ່ພົວພັນ ກັບການປະກອບ ເຂົ້າ ໃນການຜະລິດກະສິກຳຢ່າງກ້ວາງຂວາງ, ການເສີມຂະຫຍາຍ ການປູກ ຝັງ ແບບໃຊ້ຊົນລະປະທານຢ່າງສຸດຂີດ, ການປະກອບກົນຈັກຢ່າງລຶບລຸດແລະ ການຕິດຕັ້ງໄຟຟ້າເຂົ້າຮັບໃຊ້ການກະສິກຳ.

ວິທະຍາສາດ ແລະ ຄວາມກ້າວໜ້າທາງດ້ານວິທະຍາສາດ-ເຕັກນິກ ມີ ບົດບາດອັນໃຫຍ່ຫລວງໃນການກໍ່ສ້າງພື້ນຖານວັດຖຸ-ເຕັກນິກ ຂອງລະບອບ - ກອມມູນິດ ເພື່ອຮັດແນວໃດໄປຄຽງຄູ່ກັບການລົ້ມລ້ວງຂັ້ນຫາທາງດ້ານທິດສະ ດີນັ້ນໃຫ້ນຳເອົາວິທະຍາສາດໄປສຸມໃສ່ການແກ້ໄຂບັນຫາຂອດໃຈກາງໃນດ້ານ ເສດຖະກິດແຫ່ງຊາດ ແລະ ໃສ່ການລົ້ມພົບ ປະເພດທີ່ຈະສາມາດນຳ ເອົາ ການປ່ຽນແປງແບບປະຕິວັດຢ່າງແທ້ຈິງ ເຂົ້າສູ່ການຜະລິດໄດ້. ຄວາມກ້າວ ໜ້າຂອງວິທະຍາສາດ ແລະ ເຕັກນິກຊ່ວຍໃຫ້ສາມາດ ນຳໃຊ້ ຄວາມຮັ່ງມີ ແລະ ກຳລັງແຮງຂອງທຳມະຊາດ ເພື່ອສົ່ງຜົນປະໂຫຍດຂອງປະຊາຊົນ ໄດ້ ຢ່າງມີປະສິດທິຜົນກວ່າໜຸ, ໃຫ້ລົ້ມພົບພະລັງງານໄຟຟ້າປະເພດໃໝ່ ແລະ ປະດິດສ້າງພັດສະດຸຊະນິດໃໝ່, ລົ້ມລ້ວງວິທີການກະທົບໃສ່ເງື່ອນໄຂ - ທາງດ້ານດິນຟ້າອາກາດ, ພືຊຸດອະວະກາດ.ຄັ່ງ ກ.ມາກ ໄດ້ຄາດຄະເນ ໄວ້ໃນເມື່ອກ່ອນແລ້ວ ວິທະຍາສາດໄດ້ກັບກາຍມາເປັນກຳລັງການຜະລິດໂດຍ

ກ້າວຂອງສັງຄົມ.

ການເຕີບໃຫຍ່ຂະຫຍາຍຕົວຂອງການອອກແຮງງານຢ່າງບໍ່ຢຸດຢັ້ງ ແລະ ວ່ອງໄວ ມີຄວາມໝາຍສຳຄັນອັນດັບໜຶ່ງ ເພື່ອຈະກໍ່ສ້າງສັງຄົມກອມມູນິດ . ອ.ອີ.ເລນິນ ໄດ້ຂຽນໄວ້ວ່າ: "ລະບອບກອມມູນິດ ແມ່ນສະມັດຖະພາບຂອງ ການອອກແຮງງານໃນລະດັບສູງສຸດ ຂອງກຳມະກອນຜູ້ອອກແຮງງານແບບສະ ໝັກໃຈ, ແບບຕົ້ນຕົວ, ແບບຮ່ວມກັນ ແລະແບບໃຊ້ເຕັກນິກທັນສະໄໝ ຖ້າ ທຽບໃສ່ສະມັດຖະພາບຂອງການອອກແຮງງານ ພາຍໃຕ້ລະບອບທຶນນິຍົມ".๑) ກຳລັງການຜະລິດຍິ່ງມີການເຕີບໃຫຍ່ ຂະຫຍາຍຕົວເທົ່າໃດ ການພົວພັນແຫ່ງ ການຜະລິດ ກໍ່ຍິ່ງໄດ້ຮັບການປັບປຸງຂັ້ນເທົ່ານັ້ນ ແລະ ລະດັບການຫັນປ່ຽນ - ການຜະລິດໄປເປັນຂອງສັງຄົມກໍ່ຍິ່ງສູງຂັ້ນຕື່ມເທົ່ານັ້ນ.

ຢູ່ ສ.ສ.ສ.ຊ ການປະຕິບັດແຜນການ ໃນໄລຍະຫ້າປີ ເທື່ອທີສິບເອັດ, (ປີ ๑๙๖๑ -๑๙๖๕) ແມ່ນໄລຍະອັນສຳຄັນ ໃນການກໍ່ສ້າງພື້ນຖານວັດຖຸ-ເຕັກນິກ ຂອງລະບົບກອມມູນິດ, ການປັບປຸງການພົວພັນທາງສັງຄົມແລະການ ກໍ່ສ້າງຄົນໃໝ່, ໃນການເສີມຂະຫຍາຍແບບວິທີການດຳລົງຊີວິດ ແບບສັງຄົມ ນິຍົມ. ໜ້າທີ່ອັນສຳຄັນ ຂອງແຜນການຫ້າປີເທື່ອທີສິບເອັດ ແມ່ນຢູ່ບ່ອນວ່າ: ຈະຕ້ອງຮັບປະກັນເຮັດໃຫ້ຊາວໂຊວຽດ ໄດ້ມີລະດັບຄວາມຢູ່ດີກິນດີເພີ່ມຂຶ້ນໃນ ຂັ້ນຕໍ່ໄປ ບົນພື້ນຖານຖານະດ່ຽວຕໍ່ໄປນີ້ ການພັດທະນາ ເສດຖະກິດແຫ່ງຊາດ ຢ່າງໝັ້ນທ່ຽງ ແລະ ຢ່າງກ້າວໄປໜ້າຢູ່ເລື້ອຍໆ,ການເສີມຂະຫຍາຍຄວາມ ກ້າວໜ້າ ທາງດ້ານວິທະຍາສາດ - ເຕັກນິກ ຢ່າງເລິ່ງລັດ ແລະ ການ ຫັນປ່ຽນເສດຖະກິດ ໄປສູ່ເສັ້ນທາງຂະຫຍາຍຕົວແບບສຸມ, ການນຳໃຊ້ເຫງົ້າ ພະລັງການຜະລິດຢູ່ໃນປະເທດຢ່າງຖືກຕ້ອງເໝາະສົມກວ່າເກົ່າ, ການປະ ຢັດຊັບພະຍາກອນທຸກໆຊະນິດຢ່າງສຸດຂີດ ແລະ ການປັບປຸງຄຸນນະພາບ ຂອງ ວຽກງານໃຫ້ດີກວ່າເກົ່າ.

ໄປຄຽງຄູ່ກັບການກໍ່ສ້າງພື້ນຖານວັດຖຸ-ເຕັກນິກ ຂອງລະບອບ ກອມມູນິດ ຈະຕ້ອງມີການສືບຕໍ່ກໍ່ສ້າງຄົນ ທີ່ແມ່ນກຳລັງການຜະລິດອັນຕົ້ນຕໍຂອງສັງຄົມ.

---

๑) ອ.ອີ.ເລນິນ. ນິພົນຄົບຊຸດ,ເຫລັ້ມ ໓໙, ໜ້າ ๔๘.

ການເສີມຂະຫຍາຍກຳລັງການຜະລິດ ການກໍ່ສ້າງພື້ນຖານວັດຖຸ- ເຕັກນິກ
